# ການສ້າງວຽກເຮັດງານທຳ ແລະ ການດຳລົງຊີວິດ
## ສປປ ລາວ 2009

ບົດລາຍງານ ການພັດທະນາມະນຸດແຫ່ງຊາດ ເຫຼັ້ມ 4

ກະຊວງ ແຜນການ ແລະ ການລົງທຶນ ແລະ ອົງການ ສະຫະປະຊາຊາດ ເພື່ອການພັດທະນາ
ສປປ ລາວ, ນະຄອນຫຼວງວຽງຈັນ 2009

ສະຫງວນລິຂະສິດ©2009ໂດຍ:

**ກະຊວງ ແຜນການ ແລະ ການລົງທຶນ**
**ກົມສະຖິຕິ**
ລະຫັດໄປສະນີ: 60, ນະຄອນຫຼວງວຽງຈັນ, ສປປ ລາວ
ໂທລະສັບ: + 856-21-243670
ໂທລະສານ: + 856-21-243669
ອີເມວ: nhdr@etllao.com

**ອົງການສະຫະປະຊາຊາດເພື່ອການພັດທະນາ (UNDP)**
ຖະໜົນລ້ານຊ້າງ
ລະຫັດໄປສະນີ: 345, ນະຄອນຫຼວງວຽງຈັນ, ສປປ ລາວ
ໂທລະສັບ: (856-21) 267777, ໂທລະສານ: (856-21) 267799 / (856-21) 264939

ສະຫງວນລິຂະສິດ, ບໍ່ອະນຸຍາດໃຫ້ພາກສ່ວນໃດໆໃນບົດລາຍງານສະບັບນີ້ຖືກຜະລິດຊ້ຳແບບ, ຮັກສາໄວ້ໃນລະບົບທີ່ສາມາດເອົາມານຳໃຊ້ໄດ້ ຫຼື ຖືກສົ່ງຕໍ່ ບໍ່ວ່າດ້ວຍວິທີໃດໆ, ແບບເອເລັກໂຕຣນິກ, ດັດແກ້, ອັດສຳເນົາ, ບັນທຶກ ຫຼື ອື່ນໆກ່ອນໄດ້ຮັບອະນຸຍາດ

ຕາມ: ລທບ: 326/ພຈ.21102009

ພິມທີ່:  ບໍລິສັດ ເອແອນທີ ອອບຟິດ ເອັກສເພັຣສ ຈຳກັດ
ຈຳນວນ: 2,000 ເຫຼັ້ມ

# ທີມງານກະກຽມບົດລາຍງານ ການພັດທະນາມະນຸດແຫ່ງຊາດ ເຫຼັ້ມ 4 ສປປ ລາວ, 2009

### ຜູ້ຂຽນ

ພອນສະຫຼີ ສຸກສະຫວັດ
ຊາຕິ ອາຈາຢາ

### ຄະນະນໍາ ແລະ ຄຸ້ມຄອງໂຄງການ

ສະໄໝຈັນ ບຸບຜາ, ຫົວໜ້າໂຄງການ
ເພັດສະໝອນ ສອນ, ຜູ້ບໍລິຫານໂຄງການ

### ຄະນະບໍລິຫານງານ ແລະ ປະສານງານໂຄງການ

ສຸພາວອນ ດາລາວົງ, ຜູ້ປະສານງານໂຄງການ
ພິມມະຈັນ ເພຍແກ້ວ, ຜູ້ປະສານງານໂຄງການ
ປາດຖະໜາ ວົງຄໍາຊາວ, ຜູ້ຊ່ຽວຊານດ້ານການບັນຊີຂອງໂຄງການ
ວັນນະສິດ ສົມທາບູນ, ຜູ້ຊ່ວຍໂຄງການ
ສົມສະຫວັນ ສີວິໄລ, ຜູ້ອໍານວຍຄວາມສະດວກ

### ຜູ້ຊ່ວຍຂຽນ ແລະ ນັກຄົ້ນຄວ້າ

ວິໄລທອງ ສີວິໄລ
ໂອລົດ ແສນອາສາ
ຈຸລາພອນ ໄຊຍະເສນ
ສຸກສັນ ທະວິຄໍາ
ສົມສະນຸກ ນວນສີວົງ
ໂອລີເວີ ຊອນເວເກີ

### ຮູບພາບ

ທຸມມີລັດ ຣັດຕະນະວົງ
ໂອລີເວີ ຊອນເວເກີ

### ນັກຄົ້ນຄວ້າບົດເຕັກນິກສະເພາະ

ສະຖາບັນຄົ້ນຄວ້າເສດຖະກິດແຫ່ງຊາດ (ສຄສ),
ກະຊວງ ແຜນການ ແລະ ການລົງທຶນ
ກົມການສຶກສາຊັ້ນສູງ ແລະ ອະຊີວະສຶກສາ,
ກະຊວງ ສຶກສາທິການ
ກົມຄຸ້ມຄອງແຮງງານ,
ກະຊວງ ແຮງງານ ແລະ ສະຫວັດດີການສັງຄົມ

### ທີ່ປຶກສາທາງດ້ານສະຖິຕິ

ກົມສະຖິຕິ,
ກະຊວງແຜນການ ແລະ ການລົງທຶນ

### ອົງການສະຫະປະຊາຊາດເພື່ອການພັດທະນາ

ໄຊນາມ ຢາງເຊັນ ຣານາ, ຜູ້ຕາງໜ້າປະຈໍາລາວ
ສະເຕຟານ ວີຈີ, ຮອງຜູ້ຕາງໜ້າປະຈໍາລາວ
ໂຣເບີຣດ ໂກຟເຈັດສກີ, ຫົວໜ້ານັກເສດຖະສາດປະຈໍາລາວ
ພັນຈິນດາ ເລັ່ງສະຫວັດ, ຫົວໜ້າໜ່ວຍງານຫຼຸດຜ່ອນຄວາມທຸກຍາກ
ຮາຣຸມິ ຝວັນແຕສ, ນັກວິໄຈແຜນງານ
ໂຈອານາ ໄລເກຣນ, ນັກວິໄຈແຜນງານ

### ກວດແກ້ພາສາລາວ

ພັດສະກອນ ເດຊວົງສາ

### ແປພາສາ

ສະຖາບັນດິດ ອິນສີຊຽງໃໝ່

### ອອກແບບ ແລະ ຈັດໂຄງຮ່າງ

ທຸມມີລັດ ຣັດຕະນະວົງ, ອອກແບບຮູບສະແດງ ແລະ ສີ
ໂຣເບີຣດ ບຣາວ, ອອກແບບການຈັດໂຄງຮ່າງ ແລະ ໜ້າປົກ

# ບົດນຳ

ລັດຖະບານແຫ່ງ ສປປ ລາວ ແລະ ອົງການສະຫະປະຊາຊາດ ເພື່ອການພັດທະນາ ໄດ້ຮ່ວມມືກັນຢ່າງຈິງ ຈັງໃນຂະບວນການພັດທະນາ ແລະ ສ້າງສາປະເທດຊາດ ໂດຍຜ່ານການລິເລີ່ມການຈັດຕັ້ງປະຕິບັດແຜນງານ ຕ່າງໆໜຶ່ງໃນນັ້ນແມ່ນ: ໄລຍະໃນ 2004-2009, ໄດ້ມີການກະກຽມ ແລະ ສຳເລັດການຂຽນບົດລາຍງານ ການພັດທະນາມະນຸດແຫ່ງຊາດ ສອງເຫຼັ້ມຄື: ບົດລາຍງານເຫຼັ້ມທີ 3 ແມ່ນໄດ້ຄົ້ນຄວ້າໃນຫົວຂໍ້ ການຄ້າສາກົນ ແລະ ການພັດທະນາມະນຸດແຫ່ງຊາດ ຊຶ່ງໄດ້ພິມເຜີຍແຜ່ໃນປີ 2006 ແລະ ສຳລັບບົດລາຍງານ ເຫຼັ້ມ ທີ 4 ໄດ້ຄົ້ນຄວ້າລົງເລິກກ່ຽວກັບ ການສົ່ງເສີມການມີວຽກເຮັດງານທຳ ແລະ ການດຳລົງຊີວິດຢູ່ພາຍໃນປະເທດ. ນອກຈາກນັ້ນ, ໜຶ່ງໃນບັນດາໝາກຜົນທີ່ໂຄງການຍາດມາໄດ້ ແມ່ນການສ້າງຄວາມເຂັ້ມແຂງ ແລະ ຄວາມອາດສາມາດໃນການເກັບກຳ, ວິເຄາະ, ວິໄຈ ແລະ ນຳໃຊ້ຂໍ້ມູນທີ່ກ່ຽວຂ້ອງກັບການພັດທະນາມະນຸດ. ບົດລາຍງານການພັດທະນາມະນຸດແຫ່ງຊາດ ໄດ້ຮັບການແນະນຳທາງດ້ານວິຊາການ ຢ່າງເຕັມສ່ວນຈາກຄະນະທີ່ປຶກສາດ້ານເນື້ອໃນແຫ່ງຊາດ, ຊຶ່ງເປັນຄະນະທີ່ມີສະມາຊິກມາຈາກຫຼາຍພາກສ່ວນລວມທັງຜູ້ຕາງໜ້າ ຈາກບັນດາກະຊວງ, ມະຫາວິທະຍາໄລແຫ່ງຊາດ, ສະຖາບັນຄົ້ນຄວ້າ ແລະ ອົງການຈັດຕັ້ງສາກົນ. ຄະນະທີ່ປຶກສາ ໄດ້ປະກອບສ່ວນດ້ວຍຄວາມເອົາໃຈໃສ່ ແລະ ສຸມທຸກສະຕິປັນຍາຂອງຕົນຢ່າງຕັ້ງໜ້າເຂົ້າໃນການກະກຽມບົດລາຍງານ ຊຶ່ງເລີ່ມແຕ່ການກຳນົດຫົວຂໍ້, ການຈັດຫາຂໍ້ມູນ ຈົນຮອດຂັ້ນຕອນສຸດທ້າຍ ຮັບຮອງທາງດ້ານເນື້ອໃນ. ຂະບວນການສ້າງ ບົດລາຍງານການພັດທະນາມະນຸດແຫ່ງຊາດ ໄດ້ດຳເນີນໄປຢ່າງມີຫຼັກການ ແລະ ໄດ້ປຶກສາຫາລືກັນແບບມີສ່ວນຮ່ວມຢ່າງກວ້າງຂວາງ.

ເຖິງແມ່ນວ່າດັດຊະນີການພັດທະນາມະນຸດ ຂອງ ສປປ ລາວ ໄດ້ຮັບການປັບປຸງເມື່ອທຽບໃສ່ກັບບັນດາປະເທດໃນໂລກກໍ່ຕາມ, ແຕ່ ສປປ ລາວ ກໍ່ຍັງຈັດຢູ່ໃນລຳດັບທີ 130 ໃນຈຳນວນ 177 ປະເທດ. ຕົວເລກດັ່ງກ່າວ ໄດ້ສະແດງໃຫ້ເຫັນວ່າ ພວກເຮົາຍັງຕ້ອງໄດ້ສູ້ຊົນ ສຳເລັດການປະຕິບັດພາລະກິດທີ່ໜັກໜ່ວງໃນຕໍ່ໜ້າ ແລະ ບົດລາຍງານ ເຫຼັ້ມ 4 ໄດ້ພະຍາຍາມນຳສະເໜີທິດທາງຕໍ່ສິ່ງທ້າທາຍດັ່ງກ່າວ. ບົດລາຍງານສະບັບນີ້ຍັງໄດ້ສະເໜີລະດັບການພັດທະນາມະນຸດທີ່ແຕກຕ່າງກັນລະຫວ່າງແຂວງໃນຂອບເຂດທົ່ວປະເທດ.

ຜົນການຄົ້ນຄວ້າ ແລະ ວິໄຈ ໄດ້ຮຽກຮ້ອງໃຫ້ເອົາໃຈໃສ່ສ້າງຄວາມເຂັ້ມແຂງ ໃຫ້ບັນດາຂະແໜງການທີ່ມີທ່າແຮງສູງ ໃນການສ້າງວຽກເຮັດງານທຳໃຫ້ຊາວຜູ້ອອກແຮງງານ ລວມທັງຜູ້ທຸກຍາກ, ແມ່ຍິງ ແລະຊາວໜຸ່ມ. ສົ່ງເສີມບັນດາກິດຈະກຳທາງດ້ານເສດຖະກິດ ທີ່ສາມາດສ້າງລາຍຮັບ ແລະ ສ້າງສະພາບແວດລ້ອມທີ່ເອື້ອອຳນວຍໃຫ້ແກ່ການພັດທະນາພາກເອກະຊົນ, ຫົວໜ່ວຍທຸລະກິດຂະໜາດນ້ອຍ ແລະ ຂະໜາດກາງໃຫ້ມີ ການຂະຫຍາຍຕົວແບບຍືນຍົງ. ນອກນັ້ນ, ບົດລາຍງານ ຍັງຮຽກຮ້ອງໃຫ້ທຸກພາກສ່ວນເອົາໃຈໃສ່ຕໍ່ການພັດທະນາຊົນນະບົດເພື່ອຮັບປະກັນໃຫ້ຊົນນະບົດ ແລະ ປະຊາຊົນໄດ້ຮັບການປັບປຸງຄຸນນະພາບຊີວິດ ໃຫ້ດີຂຶ້ນເລື້ອຍໆ ແລະ ສ້າງຄວາມເຂັ້ມແຂງທາງດ້ານສັງຄົມ, ການເມືອງ ແລະ ເສດຖະກິດໃຫ້ແກ່ຊຸມຊົນໃນເຂດຊົນນະບົດ.

ໃນການພັດທະນາເຂດຊົນນະບົດ ຮຽກຮ້ອງໃຫ້ມີນະໂຍບາຍຄຸ້ມຄອງແຫຼ່ງຊັບພະຍາກອນທຳມະຊາດທີ່ເໝາະສົມ ໃນນັ້ນລວມມີ: ນະໂຍບາຍການຄຸ້ມຄອງທີ່ດິນ, ນ້ຳ ແລະປ່າໄມ້. ນອກຈາກນັ້ນ, ການລົງທຶນທີ່ເໝາະສົມ ແລະ ມີວິວັດທະນາການ ໃນການພັດທະນາຊັບພະຍາກອນມະນຸດເຊັ່ນ: ການສຶກສາ, ແລະ ການສ້າງທັກສະສີມື ລ້ວນແລ້ວແຕ່ເປັນສິ່ງຈຳເປັນທີ່ສຸດ. ບົດລາຍງານ ຍັງໄດ້ສະເໜີກ່ຽວກັບຄວາມຕ້ອງການໃນການປັບປຸງການເຂົ້າເຖິງໂຄ່ງລ່າງ ແລະ ເງື່ອນໄຂພື້ນຖານທາງດ້ານສາທາລະນະສຸກ ເຊັ່ນວ່າ: ນ້ຳສະອາດແລະສຸຂະອະນາໄມ. ກະຊວງ ແຜນການ ແລະ ການລົງທຶນ, ຫວັງຢ່າງຍິ່ງວ່າ ບົດລາຍງານເຫຼັ້ມນີ້ ຈະເປັນຊັບສິນທາງປັນຍາທີ່ລ້ຳຄ່າ ແລະ ສາມາດປະກອບສ່ວນເຮັດໃຫ້ການສົນທະນາ, ປຶກສາຫາ ແລະ ໂຕ້ວາທີໃນຂົງເຂດການພັດທະນາມະນຸດໄດ້ຢ່າງເລິກເຊິ່ງ ແລະ ເຊື່ອໝັ້ນວ່າ ສິ່ງທີ່ຄົ້ນພົບ ແລະ ນຳສະເໜີໃນບົດລາຍງານຈະເປັນຂໍ້ມູນຂ່າວ ສານທີ່ດີ ເພື່ອຮັບໃຊ້ເຂົ້າໃນການສ້າງແຜນການພັດທະນາເສດຖະກິດ-ສັງຄົມ ຄັ້ງທີ່ VII ຂອງ ສປປ ລາວ.



**ທ່ານ ດຣ. ບຸນທະວີ ສີສຸພັນທອງ**
ຫົວໜ້າ ຄະນະທີ່ປຶກສາດ້ານເນື້ອໃນ,
ລັດຖະມົນຕີຊ່ວຍວ່າການ, ກະຊວງ ແຜນການ ແລະ ການລົງທຶນ

# ບົດນຳ

ສປປ ລາວ ມີຄວາມໝາຍໝັ້ນຢ່າງແຮງກ້າໃນການບັນລຸເປົ້າໝາຍສະຫັດສະວັດແຫ່ງການພັດທະນາ (MDG) ພາຍໃນປີ 2015 ແລະ ຫຼຸດພົ້ນອອກຈາກ ສະຖານະພາບ ການເປັນປະເທດດ້ອຍພັດທະນາໃນປະຈຸບັນພາຍໃນປີ 2020. ການເຕີບໂຕຢ່າງກວ້າງຂວາງ ແມ່ນເງື່ອນໄຂທີ່ຂາດບໍ່ໄດ້ຢ່າງແນ່ນອນ ສຳລັບການບັນລຸເປົ້າໝາຍແຫ່ງການພັດທະນາທີ່ສຳຄັນເຫຼົ່ານີ້ ຊຶ່ງຍັງມີຫຼາຍສິ່ງຫຼາຍຢ່າງທີ່ຍັງຕ້ອງດຳເນີນ. ແນ່ນອນທີ່ສຸດ, ໃນຂະນະທີ່ປະເທດລາວໄດ້ປະສົບກັບການເຕີບໂຕທາງດ້ານເສດຖະກິດທີ່ເຂັ້ມແຂງ ໃນໄລຍະຜ່ານມາບໍ່ດົນນີ້ ແລະ ອັດຕາຄວາມທຸກຍາກ ໄດ້ຫຼຸດລົງຈາກ 46% ໃນປີ 1992/1993 ຮອດ 27% ໃນປີ 2007/2008, ແຕ່ຄວາມແຕກຕ່າງໃນພາກພື້ນ ແລະ ຄວາມບໍ່ສະເໝີພາບໃນການບໍລິໂພກຂອງກຸ່ມປະຊາກອນ ແມ່ນໄດ້ເພີ່ມຂຶ້ນ.

ວິທີການຂອງການພັດທະນາມະນຸດ ທີ່ສະໜັບສະໜູນໂດຍ ອົງການສະຫະປະຊາຊາດ ເພື່ອການພັດທະນາ (UNDP) ໄດ້ເລັງເຫັນວ່າ ການເຕີບໂຕທາງດ້ານເສດຖະກິດ ແລະ ຄວາມກ້າວໜ້າຂອງມະນຸດແມ່ນບໍ່ມີສາຍພົວພັນແບບອັດຕະໂນມັດ, ແລະ ສາຍພົວພັນດັ່ງກ່າວຕ້ອງໄດ້ມີການສ້າງຂຶ້ນຢ່າງມີສະຕິ ແລະ ຫ້າວຫັນ ໂດຍຜ່ານນະໂຍບາຍ ແລະ ການຊ່ວຍເຫຼືອຕ່າງໆຢ່າງສັນທັດ. ບົດລາຍງານການພັດທະນາມະນຸດແຫ່ງຊາດເຫຼັ້ມທີ 4 ນີ້ ກ່ຽວກັບການຈ້າງງານ ແລະ ການດຳລົງຊີວິດ ສະເໜີຂໍ້ສະເໜີແນະທີ່ມີຄ່າ ແລະ ອີງໃສ່ຫຼັກຖານຕົວຈິງ ເພື່ອບັນລຸເປົ້າໝາຍດັ່ງກ່າວ.

ການບັນລຸ ການພັດທະນາມະນຸດ ໃນລະດັບສູງຂຶ້ນ ໃນສັງຄົມໃດໆກໍ່ຕາມ ແມ່ນຂຶ້ນກັບຄວາມອາດສາມາດຂອງມະນຸດທີ່ມີ ໃນການດຳເນີນວຽກງານທີ່ມີຄຸນນະພາບພາຍໃຕ້ເງື່ອນໄຂທີ່ເໝາະສົມ. ໃນ ສປປ ລາວ, ອຸດສາຫະກຳທີ່ມີການຈ້າງງານສູງຕົ້ນຕໍ ແມ່ນໂຮງງານຕັດຫຍິບ, ອຸດສາຫະກຳປຸງແຕ່ງໄມ້ ແລະ ອາຫານ, ຫັດຖະກຳ ແລະ ການທ່ອງທ່ຽວ. ອຸດສາຫະກຳເຫຼົ່ານີ້ສາມາດເພີ່ມລາຍໄດ້, ຫຼຸດຜ່ອນຄວາມທຸກຍາກ ແລະ ໃນທີ່ສຸດກໍ່ຂະຫຍາຍໂອກາດ ແລະ ທາງເລືອກຕ່າງໆໃຫ້ແກ່ມະນຸດ. ເຖິງຢ່າງໃດກໍ່ຕາມ, ອຸດສາຫະກຳເຫຼົ່ານີ້ແມ່ນຫາກໍ່ເລີ່ມຕົ້ນໃໝ່ ແລະ ຍັງຈ້າງງານພຽງພາກສ່ວນນ້ອຍຂອງກຳລັງແຮງງານທັງໝົດ. ຜົນການສຶກສາຂອງບົດລາຍງານໄດ້ຊີ້ໃຫ້ເຫັນວ່າ ໃນຂະນະທີ່ອາຊີບຕ່າງໆ ໄດ້ຫັນປ່ຽນອອກຈາກການກະສິກຳໃນຫຼາຍປີທີ່ຜ່ານມາ, ແຕ່ມັນຍັງບໍ່ແມ່ນຈຳນວນຫຼາຍ ແລະ ກະສິກຳ ຍັງແມ່ນຫຼັກສຳຄັນຂອງເສດຖະກິດລາວ. ແຮງງານ ແລະ ຄອບຄົວຂອງເຂົາເຈົ້າຈຳນວນຫຼາຍ ຍັງຂຶ້ນກັບການກະສິກຳແບບພໍພຽງໃນລະດັບຍາກລຳບາກ ຫຼື ໃກ້ຄຽງ ເນື່ອງຈາກຂາດແຄນທາງເລືອກການດຳລົງຊີວິດທີ່ດີກວ່າ. ການເຕີບໂຕທາງດ້ານ ລວມຍອດຜະລິດຕະພັນພາຍໃນ (GDP) ຍັງບໍ່ເທົ່າທຽມກັບການເຕີບໂຕສູງຢ່າງພຽງພໍໃນວຽກງານ ແລະ ກິດຈະກຳຫາລາຍໄດ້ຕ່າງໆ. ດັ່ງນັ້ນ, ຜູ້ສ້າງນະໂຍບາຍ ແລະ ຜູ້ວາງແຜນຕ່າງໆ ຈຳເປັນຕ້ອງເພີ່ມການເລັ່ງໃສ່ ຄຸນນະພາບ ຂອງການເຕີບໂຕຂອງ GDP ຢ່າງຮີບດ່ວນ, ລວມທັງຄຸນນະພາບທີ່ເນັ້ນໜັກຂອງການລົງທຶນໂດຍກົງຈາກຕ່າງປະເທດ (FDI) ທີ່ເປັນໂຕຫຼັກໃນການຊຸກດັນການເຕີບໂຕທີ່ສູງຂຶ້ນໃນຊຸມປີທີ່ຜ່ານມາ.

ມີຄວາມຕ້ອງການອັນຈຳເປັນ ໃນການພັດທະນາ ສະພາບແວດລ້ອມທີ່ເອື້ອອຳນວຍຫຼາຍກວ່າເກົ່າ ສຳລັບຂະແໜງທຸລະກິດສ່ວນບຸກຄົນ, ແລະ ການລົງທຶນເພີ່ມຂຶ້ນສຳລັບຂະແໜງທີ່ຈ້າງງານຫຼາຍ ແລະ ສ້າງວຽກງານໃໝ່. ນອກນັ້ນ ຍັງມີຄວາມຕ້ອງການອັນຈຳເປັນໃນການກັ່ນຕອງການສົ່ງເສີມ, ການເລືອກ ແລະ ຂັ້ນຕອນການອະນຸມັດ FDI ໃຫ້ດີຂຶ້ນ ເພື່ອດຶງດູດການລົງທຶນຈາກຕ່າງ ປະເທດ ທີ່ເຮັດໃຫ້ວຽກງານ ແລະ ລາຍໄດ້ຂອງປະຊາຊົນລາວທີ່ມີຄວາມຍືນຍົງມີການເຕີບໂຕທີ່ສູງຂຶ້ນ; ມີການຖ່າຍໂອນທັກສະ ແລະ ເຕັກໂນໂລຊີທີ່ມີຄ່າຕ່າງໆໃຫ້ແກ່ຄົນງານລາວ; ແລະ ຮັກສາຊັບສິນທາງສະພາບແວດລ້ອມທີ່ຍັງມີຄ່າສູງຂອງປະເທດ.

ນອກນັ້ນ, ຍັງມີຄວາມຈຳເປັນໃນການສ້າງຄວາມດຸ່ນດ່ຽງ ລະຫວ່າງບົດບາດທີ່ເພີ່ມຂຶ້ນໃນເສດຖະກິດ ຂອງໂຄງການລົງທຶນໃຫຍ່ທີ່ອີງໃສ່ຊັບພະຍາກອນທຳມະຊາດເປັນຫຼັກ ກັບການລົງທຶນທີ່ເພີ່ມຂຶ້ນຫຼາຍຂອງລາຍໄດ້ຂອງລັດຖະບານທີ່ກ່ຽວຂ້ອງ ເຂົ້າໃນຂະແໜງສຸຂະພາບ ແລະ ການສຶກສາ ເພື່ອສ້າງຄວາມອາດສາມາດໃນການແຂ່ງຂັນຂອງກຳລັງແຮງງານໜຸ່ມທີ່ພວມເພີ່ມຂຶ້ນຢ່າງໄວວາ. ຄ້າຍຄືກັນນັ້ນ, ມີຄວາມຈຳເປັນໃນການສ້າງຄວາມດຸ່ນດ່ຽງ ລະຫວ່າງບົດບາດທີ່ເພີ່ມຂຶ້ນຂອງການລົງທຶນຈາກຕ່າງປະເທດເຂົ້າໃນການສຳປະທານທີ່ດິນ ແລະ ການປູກພືດອຸດສາຫະກຳ ກັບຄວາມຕ້ອງການ ກ່ຽວກັບຄວາມໝັ້ນຄົງທາງດ້ານອາຫານໃນອະນາຄົດຂອງປະເທດ ກໍ່ຄືໂອກາດທີ່ເພີ່ມຂຶ້ນໃນຕະຫຼາດໂລກສຳລັບການສົ່ງອອກອາຫານທີ່ມີຄຸນນະພາບ ໂດຍທີ່ມີຄວາມຕ້ອງການເພີ່ມຂຶ້ນຂອງໂລກ ແລະ ທັດສະນະຄະຕິຕໍ່ທ່າອ່ຽງທີ່ຍິ່ງເພີ່ມຂຶ້ນໃນລາຄາອາຫານໂລກ.

# ບົດນຳ

ບົດລາຍງານເຫຼັ້ມນີ້ສະໜອງຂໍ້ສະເໜີແນະທີ່ສາມາດປະຕິບັດໄດ້ ເພື່ອຕອບສະໜອງຕໍ່ໂອກາດ ແລະ ສິ່ງທ້າທາຍຕ່າງໆເຫຼົ່ານີ້. ບົດລາຍງານມີຂໍ້ແນະນຳ ກ່ຽວກັບວິທີການຕ່າງໆໃນການສົ່ງເສີມກິດຈະກຳເສີມ ນອກຈາກການເຮັດໄຮ່ເຮັດນາ ແລະ ບໍລິສັດຂະໜາດນ້ອຍ ໃນຂະແໜງທຸລະກິດສ່ວນບຸກຄົນ, ທີ່ສະໜັບສະໜູນໂດຍທຶນກູ້ຢືມ, ການຊ່ວຍເຫຼືອທາງດ້ານວິຊາການ, ການແບ່ງປັນສິ່ງອຳນວຍຄວາມສະດວກໃນຊຸມຊົນ ແລະ ການປັບປຸງການເຂົ້າເຖິງຕະຫຼາດ. ນອກນັ້ນ, ບົດລາຍງານ ຍັງສົ່ງເສີມການລົງທຶນເພີ່ມຂຶ້ນຂອງຊັບພະຍາກອນທີ່ມີເຂົ້າໃນການສຶກສາ ແລະ ສະຖາບັນການຝຶກອົບຮົມວິຊາຊີບ ແລະ ການລົງທຶນເພີ່ມຂຶ້ນເຂົ້າໃນການຜະລິດກະສິກຳ, ໂຮງຈັກໂຮງງານ ແລະ ການທ່ອງທ່ຽວ ເປັນວິທີສົ່ງເສີມການເຕີບໂຕທີ່ຍືນຍົງ ແລະ ເທົ່າທຽມ ຊຶ່ງຈະນຳໄປສູ່ການຫຼຸດຜ່ອນຄວາມທຸກຍາກ. ຍິ່ງໄປກວ່ານັ້ນ, ເນື່ອງຈາກຄວາມແຕກຕ່າງທີ່ມີພະລັງຂອງປະຊາກອນ, ບົດລາຍງານ ເນັ້ນໃຫ້ເຫັນຄວາມຕ້ອງການອັນຈຳເປັນໃນການວາງເປົ້າໝາຍ ທີ່ສະເພາະເຈາະຈົງກຸ່ມຊາວໜຸ່ມລາວ ໂດຍຜ່ານການຝຶກອົບຮົມໄລຍະສັ້ນ ແລະ ຍາວ ໃນຂົງເຂດທີ່ມີໂອກາດການຈ້າງງານສູງ.

ຂ້າພະເຈົ້າຂໍສະແດງຄວາມຮູ້ບຸນຄຸນຢ່າງຈິງໃຈຕໍ່ ກົມສະຖິຕິ, ກະຊວງ ແຜນການ ແລະ ການລົງທຶນ ສຳລັບການນຳພາ, ພ້ອມທັງຄວາມໝາຍໝັ້ນ ແລະ ວິຊາການ ໃນການກະກຽມບົດລາຍງານການພັດທະນາມະນຸດແຫ່ງຊາດເຫຼັ້ມນີ້. ບົດລາຍງານເຫຼັ້ມນີ້ ແມ່ນຜົນສຳເລັດຂອງການຮ່ວມມືກັນລະຫວ່າງ ກົມສະຖິຕິ, ກະຊວງ ແຜນການ ແລະ ການລົງທຶນ, ກະຊວງສຶກສາ, ກະຊວງແຮງງານ ແລະ ສະຫວັດດີການສັງຄົມ, ສະຖາບັນຄົ້ນຄວ້າເສດຖະກິດແຫ່ງຊາດ, ມະຫາວິທະຍາໄລແຫ່ງຊາດ ແລະ ອົງການສະຫະປະຊາຊາດເພື່ອການພັດທະນາ. ພວກເຮົາຫວັງວ່າການຮ່ວມມືເຊັ່ນນີ້ຈະສືບຕໍ່ໃນອະນາຄົດ ໃນການສະໜັບສະໜູນການຄົ້ນຄວ້າທີ່ມີຄຸນນະພາບສູງ ເພື່ອຕອບສະໜອງຄວາມຕ້ອງການໃນການຕັດສິນໃຈ.



**ໂຊນາມ ຢາງເຊັນ ຣານາ**
ຜູ້ຕາງໜ້າອົງການສະຫະປະຊາຊາດເພື່ອການພັດທະນາ
ປະຈຳ ສປປ ລາວ

# ບົດຂອບໃຈ

ບົດລາຍງານສະບັບນີ້ ໄດ້ຮັບການກະກຽມຂຶ້ນ ເພື່ອສະໜັບສະໜູນແຜນການ 5 ປີ ຄັ້ງທີ VII ຂອງ ສປປ ລາວ ໂດຍສະເພາະໃນດ້ານການສ້າງວຽກເຮັດງານທຳ ແລະ ການດຳລົງຊີວິດ. ບົດຄົ້ນຄວ້າສະບັບນີ້ ໄດ້ຮັບການສະໜັບສະໜູນຈາກ ອົງການສະຫະປະຊາຊາດເພື່ອການພັດທະນາ ພາຍໃຕ້ແຜນງານ “ການສ້າງຄວາມເຂັ້ມແຂງໃຫ້ແກ່ຂີດຄວາມສາມາດ ໃນການຂຽນບົດລາຍງານການພັດທະນາມະນຸດ”. ໃນບົດລາຍງານສະບັບນີ້, ໄດ້ມີການສຶກສາຄົ້ນຄວ້າຫຼາຍດ້ານ ໂດຍການປະສານສົມທົບກັບຫຼາຍພາກສ່ວນ ແລະ ບຸກຄົນກ່ຽວຂ້ອງຢູ່ໃນ ສປປ ລາວ; ໃນນັ້ນ, ລວມມີ ຊາວກະສິກອນ, ຜູ້ອອກແຮງງານ, ຜູ້ທີ່ໄດ້ເຮັດວຽກຢູ່ຕ່າງປະເທດ ແລະ ກຳມະກອນທີ່ຢູ່ໃນໂຮງຈັກໂຮງງານ, ແມ່ຍິງ, ພະນັກງານລັດຖະກອນຂັ້ນຕ່າງໆ ແລະ ຜູ້ຊ່ຽວຊານຈາກສາກົນ.

ການກະກຽມ ແລະ ການຄົ້ນຄວ້າບົດລາຍງານສະບັບນີ້ ແມ່ນໄດ້ດຳເນີນໄປພາຍໃຕ້ການຊີ້ນຳຢ່າງໃກ້ຊິດ ຈາກຄະນະທີ່ປຶກສາດ້ານເນື້ອໃນແຫ່ງຊາດ ໂດຍສະເພາະແມ່ນ ທ່ານ ບຸນທະວີ ສີສຸພັນທອງ, ຫົວໜ້າຄະນະທີ່ປຶກສາແຫ່ງຊາດ, ລັດຖະມົນຕີຊ່ວຍວ່າການ ກະຊວງ ແຜນການ ແລະ ການລົງທຶນ ຊຶ່ງໄດ້ໃຫ້ກຽດເຂົ້າຮ່ວມ ແລະ ໃຫ້ການຊີ້ນຳກອງປະຊຸມຄະນະທີ່ປຶກສາທຸກໆຄັ້ງ. ນອກຈາກນັ້ນ, ບັນດາທ່ານ ຍັງໄດ້ທົບທວນຮ່າງບົດລາຍງານຕ່າງໆ ແລະ ປະກອບຄຳເຫັນຕໍ່ບົດລາຍງານເຫຼົ່ານັ້ນຢ່າງປົກກະຕິ. ສະມາຊິກຄະນະທີ່ປຶກສາປະກອບມີ ທ່ານ ດຣ. ລີເບີ ລີບົວປາວ (ສະຖາບັນຄົ້ນຄວ້າເສດຖະກິດແຫ່ງຊາດ), ທ່ານ ສິງຄຳ ບຸນລືໄຕ (ກະຊວງ ອຸດສາຫະກຳ ແລະ ການຄ້າ), ທ່ານ ຮສ.ດຣ ຄຳລືຊາ ນວນສະຫວັນ (ມະຫາວິທະຍາໄລແຫ່ງຊາດ), ທ່ານ ບຸນສະໝັກ ໄຊຍະແສງ (ກະຊວງ ແຜນການ ແລະ ການລົງທຶນ), ທ່ານ ນາງ ພອນເພັດ ບຸບຜາ (ກະຊວງ ສຶກສາທິການ), ທ່ານ ໄຊສົງຄາມ ພົມມະສອນ (ສະຖາບັນຄົ້ນຄວ້າກະສິກຳ ແລະ ປ່າໄມ້ແຫ່ງຊາດ), ທ່ານ ພອນດາວັນ ພົນສະຫວັນ (ສູນກາງສະຫະພັນແມ່ຍິງລາວ), ທ່ານ ຄຳແສງດາວ ປະທຳມະວົງ (ກະຊວງ ອຸດສາຫະກຳ ແລະ ການຄ້າ), ທ່ານ ບຸນມາ ສິດທິສົມ (ກະຊວງ ແຮງງານ ແລະ ສະຫວັດດີການສັງຄົມ), ທ່ານ ນາງ ໂຊນາມ ຢາງເຊັນ ຮານາ (ອົງການສະຫະປະຊາຊາດເພື່ອການພັດທະນາ), ທ່ານ ໂຣເບີດ ໂກພເຈັດສກີ (ປະທານຮ່ວມຈາກ ອົງການສະຫະປະຊາຊາດ ເພື່ອການພັດທະນາ), ທ່ານ ສະເຕຟານ ວີຈີ (ອົງການສະຫະປະຊາຊາດເພື່ອການພັດທະນາ), ທ່ານ ນາງ ພັນຈິນດາ ເລັ່ງສະຫວັດ (ອົງການສະຫະປະຊາຊາດເພື່ອການພັດທະນາ) ແລະ ຜູ້ຕາງໜ້າອົງການແຮງງານສາກົນ (ILO).

ຄະນະຮັບຜິດຊອບໂຄງການ ກໍ່ຂໍສະແດງຄວາມຂອບອົກຂອບໃຈເປັນພິເສດ ໄປຍັງຄອບຄົວ ແລະ ຊາວຜູ້ອອກແຮງງານຫຼາຍກວ່າພັນຄອບຄົວ ທີ່ຢູ່ຕາມຕົວເມືອງຕ່າງໆ ແລະ ໃນເຂດຫ່າງໄກສອກຫຼີກ ທີ່ໄດ້ປະກອບສ່ວນຕອບຄຳຖາມຂອງພວກເຮົາ ດ້ວຍຄວາມຖືກຕ້ອງ ແລະ ຍິ້ມແຍ້ມແຈ່ມໃສ. ຖ້າປາດສະຈາກການປະກອບສ່ວນດັ່ງກ່າວຂອງພວກທ່ານ, ບົດລາຍງານສະບັບນີ້ ໄດ້ອີງໃສ່ສະເພາະແຕ່ຂໍ້ມູນທີ່ມີຢູ່ນຳອົງການຈັດຕັ້ງທີ່ກ່ຽວຂ້ອງຂອງລັດ ໃນຂັ້ນກົມ ແລະ ກະຊວງເທົ່ານັ້ນ.

ສຳຄັນໄປກວ່ານັ້ນ, ຄະນະຮັບຜິດຊອບໂຄງການ ຂໍສະແດງຄວາມຂອບໃຈຢ່າງສູງມາຍັງ ອຳນາດການປົກຄອງທ້ອງຖິ່ນທຸກຂັ້ນ (ບ້ານ, ເມືອງ ແລະ ແຂວງ) ແລະ ພະນັກງານຈາກຫຼາຍກະຊວງທີ່ກ່ຽວຂ້ອງ ໂດຍສະເພາະກໍ່ແມ່ນ ພະນັກງານຈາກພະແນກ ແຜນການ ແລະ ການລົງທຶນຂອງແຂວງ ທີ່ໄດ້ປະກອບສ່ວນຢ່າງເຕັມສ່ວນໃນການປະສານງານ ແລະ ການຮ່ວມມືທີ່ຈຳເປັນຕ່າງໆນັບທັງເວລາ ແລະ ເຫື່ອແຮງເພື່ອສະໜອງຂໍ້ມູນສຳຄັນເຂົ້າໃນການຂຽນບົດລາຍງານຄັ້ງນີ້. ນອກຈາກນັ້ນ, ທີມງານຄົ້ນຄວ້າຜູ້ໜຸ່ມນ້ອຍຈາກກົມອະຊີວະສຶກສາ ແລະ ການສຶກສາຊັ້ນສູງ, ກະຊວງສຶກສາທິການ, ກົມຄຸ້ມຄອງແຮງງານ, ກະຊວງແຮງງານ ແລະ ສະຫວັດດີການສັງຄົມ ແລະ ສະຖາບັນຄົ້ນຄວ້າເສດຖະກິດແຫ່ງຊາດທີ່ໄດ້ປະກອບສ່ວນຢ່າງຕັ້ງໜ້າໃນການກະກຽມບົດຄົ້ນຄວ້າດ້ານວິຊາການສາມບົດ ເພື່ອເປັນເອກະສານອ້າງອີງ ໃຫ້ແກ່ການຂຽນບົດລາຍງານສະບັບນີ້ແຕ່ຕົ້ນຕະຫຼອດປາຍ ນັບແຕ່ການລົງເກັບກຳຂໍ້ມູນຢູ່ພາກສະໜາມ ແລະ ວິໄຈຂໍ້ມູນທີ່ມີຢູ່ແລ້ວ ຢ່າງມີປະສິດທິຜົນທີ່ສຸດ. ຂໍ້ມູນຕ່າງໆຈາກບົດຄົ້ນຄວ້າເຫຼົ່ານັ້ນ ແມ່ນມີປະໂຫຍດຢ່າງຫຼວງຫຼາຍ ໃຫ້ແກ່ການຂຽນບົດລາຍງານສະບັບນີ້ ເພາະມັນໄດ້ຊ່ວຍເປີດກວ້າງແນວຄວາມຄິດໃນການວິເຄາະ, ວິໄຈ ແລະ ທັງຊ່ວຍໃຫ້ຫຼາຍພາກສ່ວນທີ່ກ່ຽວຂ້ອງ ໄດ້ເຂົ້າມາມີສ່ວນຮ່ວມໃນການຄົ້ນຄວ້າ ຮ່ວມກັບ ກະຊວງ ແຜນການ ແລະ ການລົງທຶນ; ພ້ອມນີ້ ພະນັກງານຢູ່ສູນຄອມພິວເຕີຂອງ ກົມສະຖິຕິ, ຜທ ກໍ່ໄດ້ເຮັດໜ້າທີ່ ປ້ອນຂໍ້ມູນ ແລະ ກວດສອບຄວາມຖືກຕ້ອງຂອງຂໍ້ມູນດ້ວຍຄວາມຮັບຜິດຊອບຕື່ມອີກ.

ຄະນະຮັບຜິດຊອບໂຄງການຂໍສະແດງຄວາມຮູ້ບຸນຄຸນຕໍ່ ທ່ານ ນາງ ພອນສະຫຼີ ສຸກສະຫວັດ ແລະ ທ່ານ ດຣ. ຊາຕີ ອາຈາຢາ ທີ່ມີຄວາມພະຍາຍາມໃນການນຳພາການກະກຽມ ແລະ ທັງເຮັດໜ້າທີ່ຕົ້ນຕໍໃນການຂຽນບົດລາຍງານສະບັບນີ້. ພ້ອມກັນນັ້ນ, ກໍ່ຂໍຂອບໃຈມາຍັງ

# ບົດຂອບໃຈ

ຄະນະທີ່ປຶກສາສາກົນແລະພະນັກງານຈາກອົງການສະຫະປະຊາຊາດເພື່ອການພັດທະນາປະຈຳສປປລາວທີ່ໄດ້ປະກອບສ່ວນດ້ານເວລາ ໃນການທົບທວນ ແລະ ປະກອບຄຳຄິດເຫັນທີ່ເປັນປະໂຫຍດໃຫ້ແກ່ການຄົ້ນຄວ້າ ແລະ ການກະກຽມບົດລາຍງານດັ່ງກ່າວນີ້.

ພິເສດ ຂໍສະແດງຄວາມຂອບໃຈຕໍ່ ທ່ານ ນາງ ເພັດສະໝອນ ສອນ ຜູ້ຄຸ້ມຄອງໂຄງການ ພ້ອມດ້ວຍທີມງານ ຈາກກະຊວງແຜນການ ແລະ ການລົງທຶນ, ທ່ານ ນາງ ພັນຈິນດາ ເລັ່ງສະຫວັດ, ທ່ານ ນາງ ຣາຣຸມີ ຝວັນແຕສ ແລະ ທ່ານ ນາງ ໂຈອານາ ໄລເກຣນ ຈາກ ອົງການສະຫະປະຊາຊາດ ເພື່ອການພັດທະນາ ປະຈຳ ສປປ ລາວ ທີ່ໄດ້ເຮັດໜ້າຄຸ້ມຄອງໂຄງການເປັນຢ່າງດີ. ສຸດທ້າຍນີ້, ຂໍຂອບໃຈຕໍ່ ທ່ານ ພັດສະກອນ ເດຊວົງສາ ແລະ ທ່ານ ສະຖາບັນດິດ ອິນສີຊຽງໃໝ່ ທີ່ໄດ້ກວດແກ້ພາສາລາວ ແລະ ແປບົດລາຍງານເປັນພາສາລາວ.

ອີກເທື່ອໜຶ່ງ, ພວກຂ້າພະເຈົ້າ ຫວັງຢ່າງຍິ່ງວ່າ ບົດລາຍງານສະບັບນີ້ ຈະເປັນເອກະສານອ້າງອີງສຳຄັນ ໃຫ້ແກ່ການກຳນົດນະໂຍບາຍຂອງລັດຖະບານ ເພື່ອຊ່ວຍໃຫ້ສາມາດເພີ່ມວຽກເຮັດງານທຳ ແລະ ຍົກສູງຊີວິດການເປັນຢູ່ຂອງຊາວຜູ້ອອກແຮງງານໄດ້ໃນລະດັບໃດໜຶ່ງ.



**ດຣ. ສະໄໝຈັນ ບຸບຜາ**
ຫົວໜ້າ ໂຄງການ ສ້າງຄວາມເຂັ້ມແຂງສຳລັບການຂຽນ
ບົດລາຍງານການພັດທະນາມະນຸດແຫ່ງຊາດ
ຫົວໜ້າ ກົມສະຖິຕິ, ກະຊວງ ແຜນການ ແລະ ການລົງທຶນ
ລັດຖະບານ ແຫ່ງ ສປປ ລາວ
ນະຄອນຫຼວງວຽງຈັນ, ເມສາ 2009

# ສາລະບານ

## ບົດສັງລວມຫຍໍ້


**ບົດສັງລວມຫຍໍ້** XXII

ພາກທີ 1: ບົດນຳ XXII
ພາກທີ 2: ຜົນການສຶກສາວິໄຈ XXII
ພາກທີ 3: ການຮັກສາຄຳໝັ້ນສັນຍາ - ນະໂຍບາຍເພື່ອການປັບປຸງໃຫ້ດີຂຶ້ນ XXVII

ບົດທີ 1:
**ພາກສະເໜີ** 1

ຈຸດປະສົງ 3
ເນື້ອໃນຂອງບົດລາຍງານການສຶກສາຄົ້ນຄວ້າ 3
ເປົ້າໝາຍຂອງບົດລາຍງານ 5
ວິທີການ 5

**ເອກະສານຊ້ອນທ້າຍ 1.1:**
ການພັດທະນາມະນຸດ ແລະ ການສ້າງວຽກເຮັດງານທຳ 8

ບົດທີ 2:
**ການພັດທະນາມະນຸດ: ການຕີລາຄາສະພາບ ແລະ ລະດັບໂດຍການນຳໃຊ້ຕົວຊີ້ບອກ** 9

ສະພາບລວມ 11
ຈຸດປະສົງ 12
ຜົນການດຳເນີນງານດ້ານການພັດທະນາມະນຸດໂດຍອີງໃສ່ແຕ່ລະຕົວຊີ້ບອກ 12
- ບາງບັນຫາຂອງການບໍລິຫານຄຸ້ມຄອງເສດຖະກິດ 12
- ມາດຕະຖານການດຳລົງຊີວິດຂອງປະຊາຊົນໄດ້ຮັບການປັບປຸງໃຫ້ດີຂຶ້ນ, ແຕ່ຄວາມແຕກໂຕນກັນລະຫວ່າງພາກຕ່າງໆກໍ່ຍັງມີຢູ່ 16
- ການສ້າງຄວາມເຂັ້ມແຂງໃຫ້ແກ່ມະນຸດ: ການຮູ້ໜັງສື, ການສຶກສາ ແລະ ສຸຂະພາບ 19

ການປະເມີນການພັດທະນາມະນຸດໂດຍຜ່ານອົງປະກອບຂອງຫຼາຍດັດຊະນີ 29
ຂໍ້ສະເໜີແນະຕົ້ນຕໍ 33

**ເອກະສານຊ້ອນທ້າຍ 2.1:**
ການຄິດໄລ່ດັດຊະນີການພັດທະນາມະນຸດ 35

# ສາລະບານ


ບົດທີ 3:

**ເສີມຂະຫຍາຍທາງເລືອກໃນການປະກອບອາຊີບຂອງປະຊາຊົນ: ການສຶກສາວິໄຈແຍກຕາມຂະແໜງການ** 37

ສະພາບລວມ 39
ຈຸດປະສົງ 40
ການສ້າງຄວາມຫຼາກຫຼາຍໃຫ້ແກ່ຂະແໜງການ ແລະ ອາຊີບການງານ 40
ການສ້າງຄວາມຫຼາກຫຼາຍໃນລະດັບຂະແໜງການຍັງມີໜ້ອຍ 40
ສິ່ງເສີມອາຊີບໃນຂະແໜງການທີ່ບໍ່ແມ່ນກະສິກຳ: ການສຶກສາວິໄຈລົງເລິກຂະແໜງການຍ່ອຍ 45
ຜ່ານຜ່າອຸປະສັກ: ເບື້ອງໃຫ້ການສະໜອງ 56
ຂໍ້ສະເໜີແນະຕົ້ນຕໍ 64

**ເອກະສານຊ້ອນທ້າຍ 3.1:**
ຕົວປ່ຽນສຳຄັນລຳລັບການສຶກສາວິໄຈດ້ານແຮງງານ 65

**ເອກະສານຊ້ອນທ້າຍ 3.2:**
ການສົມທຽບຕົວເລກ, ການສຳຫຼວດພົນລະເມືອງ ແລະ ທີ່ຢູ່ອາໄສ ແລະ ການສຳຫຼວດເສດຖະກິດທົ່ວປະເທດ 67

ບົດທີ 4:

**ປັບປຸງການສ້າງວຽກເຮັດງານທຳ ແລະ ການດຳລົງຊີວິດຂອງແມ່ຍິງ ແລະ ເດັກນ້ອຍຢູ່ເຂດຊົນນະບົດ** 69

ສະພາບລວມ 71
ຈຸດປະສົງ 72
ການມີວຽກເຮັດງານທຳ ແລະ ການຫວ່າງງານ 72
ຜູ້ອອກແຮງງານເຮັດຫຍັງ? 72
ການຫວ່າງງານໃນກຸ່ມບ້ານທີ່ໄດ້ສຳຫຼວດຢູ່ ສປປ ລາວ 79
ລາຍຮັບ, ປັດໄຈທີ່ດິນ ແລະ ມະນຸດ 88
ລາຍຮັບ 88
ປັດໄຈທີ່ດິນກະສິກຳ ແລະ ມະນຸດ 92
ການປ່ຽນແປງການດຳລົງຊີວິດຂອງຊາວບ້ານ: ຂໍ້ສັງເກດຈາກການເກັບກຳຂໍ້ມູນພາກສະໜາມ 96
ຂໍ້ສະເໜີແນະຕົ້ນຕໍ 101

**ເອກະສານຊ້ອນທ້າຍ 4.1:**
ຄຳນິຍາມ ແລະ ການເກັບກຳຂໍ້ມູນ 103

**ເອກະສານຊ້ອນທ້າຍ 4.2:**
ອະທິບາຍຕົວປ່ຽນຕ່າງໆຂອງລາຍຮັບ 105

# ສາລະບານ


ບົດທີ 5:

**ການສົ່ງເສີມວຽກເຮັດງານທຳທີ່ມີຄຸນຄ່າໃຫ້ແກ່ແຮງງານທີ່ມີລາຍຮັບຕໍ່າໃນຕົວເມືອງ ແລະ ແຮງງານເຄື່ອນຍ້າຍໄປເຮັດຢູ່ວຽກຢູ່ຕ່າງປະເທດ 107**

ສະພາບລວມ 109
ຈຸດປະສົງ 110
ແຮງງານໃນຕົວເມືອງທີ່ຢູ່ໃນ 'ຂະແໜງວຽກທີ່ມີລາຍຮັບຕໍ່າ' 111
ໂອກາດການເຂົ້າເຖິງວຽກເຮັດງານທຳ, ການປ່ຽນ ແລະ ການສືບຕໍ່ວຽກງານ 111
ເງື່ອນໄຂໃນການເຮັດວຽກ 118
ລາຍຮັບ, ຄວາມບໍ່ແນ່ນອນຂອງລາຍຮັບ ແລະ ດ້ານອື່ນໆທີ່ກ່ຽວຂ້ອງ 122
ແຮງງານເຄື່ອນຍ້າຍໄປເຮັດວຽກຢູ່ຕ່າງປະເທດ 126
ດ້ານຈຳນວນ, ລາຍຮັບ, ສະຖານທີ່ ແລະ ຊ່ອງທາງການໄປ 126
ສະພາບແວດລ້ອມຂອງການເຮັດວຽກ 129
ການສົ່ງເງິນກັບບ້ານ 132
ການນຳໃຊ້ແຮງງານລາວທີ່ກັບຈາກການໄປເຮັດວຽກຢູ່ປະເທດໄທ 134
ຂໍ້ສະເໜີແນະຕົ້ນຕໍ 138

**ເອກະສານຊ້ອນທ້າຍ 5.1:**
ການສຳຫຼວດແຮງງານໃນຕົວເມືອງ 140

**ເອກະສານຊ້ອນທ້າຍ 5.2:**
ການສຳຫຼວດພາກສະໜາມຂອງແຮງງານທີ່ໄປເຮັດວຽກຢູ່ປະເທດໄທ 141

**ເອກະສານຊ້ອນທ້າຍ 5.3:**
ຕົວກຳນົດລາຍຮັບ 142

ບົດທີ 6:

**ການລົງທຶນສ້າງຄົນເພື່ອສ້າງຄວາມສາມາດໃນການປະກອບອາຊີບ ແລະ ທາງເລືອກທີ່ຫຼາກຫຼາຍໃຫ້ແກ່ແຮງງານ 143**

ສະພາບລວມ 145
ຈຸດປະສົງ 146
ເປົ້າໝາຍເພື່ອບັນລຸການສຶກສາຊັ້ນປະຖົມແບບທົ່ວເຖິງ 146
ການທົບທວນຄືນດ້ານການສຶກສາເຕັກນິກ ແລະ ວິຊາຊີບ ໃນ ສປປ ລາວ 149
ການໃຫ້ການສຶກສາແກ່ຊາວຜູ້ອອກແຮງງານ: ທາງເລືອກອີກທາງໜຶ່ງ 153
ປັບປຸງລະດັບຄວາມສາມາດຂອງມະນຸດ ໂດຍຜ່ານການພັດທະນາທຸລະກິດ ແລະ ການພັດທະນາຊຸມຊົນ 155
ໂຮງຮຽນບໍ່ແຮ່ ແລະ ທໍລະນີສາດ 156
ຂໍ້ສະເໜີແນະຕົ້ນຕໍ 157

# ສາລະບານ


ບົດທີ 7:
**ບົດສັງລວມ ແລະ ທິດທາງຕໍ່ໜ້າ** 159

ຜົນຂອງການສຶກສາໂດຍສັງເຂບ 161
ຂໍ້ສະເໜີແນະເພື່ອປັບປຸງການພັດທະນາມະນຸດໂດຍການສ້າງວຽກເຮັດງານທຳ 162
ສິ່ງທ້າທາຍໃໝ່ໃນຕໍ່ໜ້າ 164

**ເອກະສານອ້າງອີງ** 167

ເອກະສານຊ້ອນທ້າຍ I:
**ຂໍ້ມູນພື້ນຖານຂອງ ສປປ ລາວ ຕົວຊີ້ບອກດ້ານການພັດທະນາມະນຸດ** 181

ຕາຕະລາງ 1: ຂໍ້ມູນພື້ນຖານຂອງ ສປປ ລາວ 183
ຕາຕະລາງ 2: ຕົວຊີ້ບອກດ້ານການພັດທະນາມະນຸດ 184
ຕາຕະລາງ 3: ຂໍ້ມູນຄວາມທຸກຍາກ ແລະ ຕົວຊີ້ບອກທີ່ກ່ຽວຂ້ອງ 185
ຕາຕະລາງ 4: ຂໍ້ມູນດ້ານປະຊາກອນ 188
ຕາຕະລາງ 5: ການແຈກຢາຍຂອງປະຊາກອນແບ່ງຕາມເພດ ແລະ ແຂວງ 190
ຕາຕະລາງ 6: ການວັດແທກອັດຕາການຕາຍ 191
ຕາຕະລາງ 7: ຂໍ້ມູນດ້ານສຸຂະພາບ 193

ເອກະສານຊ້ອນທ້າຍ II:
**ຂໍ້ມູນດ້ານເສດຖະກິດມະຫາພາກ ແລະ ການສຶກສາ** 195

ຕາຕະລາງ 8: ຂໍ້ມູນການສຶກສາ ແລະ ຊັບພະຍາກອນມະນຸດ 197
ຕາຕະລາງ 9: ຂໍ້ມູນກ່ຽວກັບຕະຫຼາດ, ຄົມມະນາຄົມ ແລະ ການຂົນສົ່ງ 201
ຕາຕະລາງ 10: ລວມຍອດຜະລິດຕະພັນພາຍໃນ ແລະ ຂໍ້ມູນທີ່ກ່ຽວຂ້ອງ 205

ເອກະສານຊ້ອນທ້າຍ III:
**ຂໍ້ມູນດ້ານແຮງງານ** 207

ຕາຕະລາງ 11: ອັດຕາສ່ວນການມີສ່ວນຮ່ວມໃນການເຮັດວຽກ 209
ຕາຕະລາງ 12: ກິດຈະກຳຂອງຜູ້ອອກແຮງງານແບ່ງຕາມຂະແໜງການຫຼັກ 210
ຕາຕະລາງ 13: ກິດຈະກຳຂອງຜູ້ອອກແຮງງານແບ່ງຕາມສະຖານະພາບຫຼັກໃນການເຮັດວຽກ 211
ຕາຕະລາງ 14: ຂໍ້ມູນດ້ານຕະຫຼາດແຮງງານ 212
ຕາຕະລາງ 15: ກິດຈະກຳທາງເສດຖະກິດຂອງຜູ້ອອກແຮງງານ 214
ຕາຕະລາງ 16: ໂຄງປະກອບຫົວໜ່ວຍເສດຖະກິດພື້ນຖານຕາມແຕ່ລະຂະແໜງ ແບ່ງຕາມຮູບການຈັດຕັ້ງ ເສດຖະກິດ 217
ຕາຕະລາງ 17: ຈຳນວນແຮງງານ, ແຮງງານສະເລ່ຍ ແລະ ໂຄງປະກອບແຮງງານແບ່ງຕາມຂະແໜງການ ເສດຖະກິດ 219

# ສາລະບານ

## ລາຍການກ່ອງ


| | | |
|---|---|---|
| ກ່ອງ 1.1: | ປະຫວັດຄວາມເປັນມາຂອງລາວ | 6 |
| ກ່ອງ 2.1: | ຄວາມຄິດເຫັນຂອງຊາວບ້ານກ່ຽວກັບສະພາບປ່າໄມ້ ແລະ ນ້ຳ-ເລືອກສັງເກດການ | 14 |
| ກ່ອງ 2.2: | ທັດສະນະ ແລະ ຄວາມຄິດເຫັນຕໍ່ການສຶກສາ | 22 |
| ກ່ອງ 2.3: | ຢູ່ໃນ ສປປ ລາວ ມີຄວາມສະເໝີພາບດ້ານບົດບາດຍິງ-ຊາຍບໍ່? | 31 |
| ກ່ອງ 2.4: | ການຕິດຕາມການພັດທະນາມະນຸດໃນລະດັບລະອຽດ | 33 |
| ກ່ອງ 3.1: | ການຈ້າງງານໃນຂະແໜງທີ່ບໍ່ແມ່ນກະສິກຳຊ່ວຍສົ່ງເສີມການຫຼຸດຜ່ອນຄວາມທຸກຍາກຢູ່ລາວ: ຢັ້ງຢືນໄດ້ຈາກຂໍ້ມູນໃນປະຫວັດທີ່ຜ່ານມາ | 42 |
| ກ່ອງ 3.2: | ຄວາມຫຼາກຫຼາຍທາງດ້ານອາຊີບຕາມກຸ່ມຊົນເຜົ່າ | 43 |
| ກ່ອງ 3.3: | ການຂະຫຍາຍໂຕຂອງຂະແໜງກະສິກຳ, ຄວາມທຸກຍາກ ແລະ ການພັດທະນາມະນຸດ | 55 |
| ກ່ອງ 3.4: | ການສຶກສາ ແລະ ການຈ້າງແຮງງານແມ່ຍິງ | 57 |
| ກ່ອງ 3.5: | ການແຈກຢາຍຫົວໜ່ວຍທຸລະກິດທີ່ບໍ່ແມ່ນກະສິກຳຕາມເຂດ ແລະ ພາກ | 61 |
| ກ່ອງ 3.6: | ຜົນການສຶກສາດ້ານການດຳເນີນທຸລະກິດໃນ ສປປ ລາວ ໃນໄລຍະຜ່ານມາ | 62 |
| ກ່ອງ 4.1: | ບາງກໍລະນີທີ່ເກີດຂຶ້ນກັບແຮງງານຮັບຈ້າງທົ່ວໄປ | 74 |
| ກ່ອງ 4.2: | ການຄຸ້ມຄອງປະຊາກອນທີ່ຖືກຍົກຍ້າຍ | 77 |
| ກ່ອງ 4.3: | ວຽກຮັບຈ້າງໃນບ້ານທີ່ຖືກຈັດສັນໃໝ່ | 78 |
| ກ່ອງ 4.4: | ເປັນຫຍັງຈຶ່ງມີສະພາບການຫວ່າງງານໄລຍະຍາວບໍ່ຫຼາຍຢູ່ປະເທດກຳລັງພັດທະນາທີ່ມີລາຍຮັບຕ່ຳ? | 80 |
| ກ່ອງ 4.5: | ສອງຄຳນິຍາມຂອງການຫວ່າງງານ | 81 |
| ກ່ອງ 4.6: | ການຫວ່າງງານຕາມລະດູການ | 82 |
| ກ່ອງ 4.7: | ການຫວ່າງງານໃນກຸ່ມຜູ້ຄອບຄອງທີ່ດິນຂະໜາດນ້ອຍ | 84 |
| ກ່ອງ 4.8: | ການຫວ່າງງານ ແລະ ເວລາຫວ່າງ – ບາງທັດສະນະຈາກການສຳຫຼວດພາກສະໜາມ | 85 |
| ກ່ອງ 4.9: | ແຜນງານຮອງຮັບດ້ານການຈ້າງງານສຳລັບການຫວ່າງງານຕາມລະດູການ | 86 |
| ກ່ອງ 4.10: | ການສະສົມທຶນມະນຸດ ແລະ ຄວາມຂາດແຄນທຶນມະນຸດ: ຄຳນິຍາມ | 93 |
| ກ່ອງ 4.11: | ອະທິບາຍຄວາມແຕກຕ່າງທາງດ້ານລາຍຮັບ | 96 |
| ກ່ອງ 4.12: | ສິ່ງທີ່ມີຢູ່ບໍ່ພໍພຽງສຳລັບການດຳລົງຊີວິດ | 97 |
| ກ່ອງ 4.13: | ກໍລະນີຕ່າງໆຂອງສະພາບນ້ຳເສຍ | 98 |
| ກ່ອງ 4.14: | ປະຊາຊົນຍັງບໍ່ທັນໄດ້ຮັບເງິນຊົດເຊີຍຄ່າທີ່ດິນ | 100 |
| ກ່ອງ 4.15: | ໃຜເປັນຜູ້ປູກພືດ, ໃຜເປັນຜູ້ເກັບກ່ຽວຜົນ: ການຊື້ຂາຍພືດສິນຄ້າໃນຕະຫຼາດ | 101 |
| ກ່ອງ 5.1: | ລະບົບຂໍ້ມູນຂ່າວສານດ້ານຕະຫຼາດແຮງງານ | 112 |
| ກ່ອງ 5.2: | ການໃຫ້ພະນັກງານຮ້ານອາຫານຢູ່ປາກເຊຢຸດວຽກ | 116 |
| ກ່ອງ 5.3: | ຄວາມຈຳເປັນໃນການໃຫ້ການສະໜັບສະໜູນແກ່ແຮງງານທີ່ປະກອບອາຊີບອິດສະຫຼະ | 116 |
| ກ່ອງ 5.4: | ບໍ່ມີການພັດທະນາ ຫຼື ການປ່ຽນວຽກ: ແຮງງານຜູ້ໜຶ່ງຢູ່ເມືອງໄກສອນພົມວິຫານ | 120 |
| ກ່ອງ 5.5: | ຢູ່ທ້າຍອຸບມຸງແຫ່ງນີ້ມີແສງສະຫວ່າງຫຼືບໍ່? ທາງສຽງຂອງແມ່ຄ້າຢູ່ນະຄອນຫຼວງວຽງຈັນ. | 120 |
| ກ່ອງ 5.6: | ຊົ່ວໂມງເຮັດວຽກຫຼາຍກວ່າ ແລະ ໄດ້ຄ່າຈ້າງ 10,000 ກີບຕໍ່ມື້: ຈາກແຮງງານຜູ້ໜຶ່ງຢູ່ເມືອງໄກສອນພົມວິຫານ | 120 |
| ກ່ອງ 5.7: | ການປະກັນສັງຄົມຊ່ວຍແຮງງານໄດ້ ແຕ່ກໍ່ຍັງມີຂອບເຂດຈຳກັດ | 122 |
| ກ່ອງ 5.8: | ການປະກັນສັງຄົມຈຸລະພາກ | 126 |
| ກ່ອງ 5.9: | ຈະຈົດທະບຽນແຮງງານ ຫຼື ບໍ່ຈົດທະບຽນ | 128 |
| ກ່ອງ 5.10: | ສົ່ງອອກໄປເຮັດວຽກ...ແລະ ຕ້ອງຈ່າຍຕາມລາຄາ | 129 |
| ກ່ອງ 5.11: | ບໍ່ເຮັດຕາມສັນຍາ, ເຮັດວຽກຫຼາຍຊົ່ວໂມງ ແລະ ອັນຕະລາຍຕ່າງໆ | 130 |
| ກ່ອງ 5.12: | ການຕົກທອດຂອງຄວາມທຸກຍາກ | 131 |
| ກ່ອງ 5.13: | ຄົນທີ່ທ່ານເຊື່ອໃຈ ອາດບໍ່ຈິງໃຈ | 132 |

# ສາລະບານ

ກ່ອງ 5.14: ຄວາມສາມັກຄີໃນສັງຄົມ: ຄືຄ່າຂອງຄວາມຈະເລີນ 133
ກ່ອງ 5.15: ສິ່ງລໍ້ລວງໃຈ ແລະ ອື່ນໆ 134
ກ່ອງ 5.16: ກໍລະນີຕ່າງໆໃນການຖ່າຍທອດທັກສະສີມືແຮງງານ 135
ກ່ອງ 5.17: ການກັບມາຄືນຂອງແຮງງານລາວ ເພື່ອສ້າງເສດຖະກິດ ແລະ ຄວາມຍືນຍົງ 136
ກ່ອງ 5.18: ບາງຕົວຢ່າງ: ສູນເຕົ້າໂຮມແຫ່ງຊາດສຳລັບແຮງງານຕ່າງດ້າວຊາວຟີລິປິນ 137
ກ່ອງ 6.1: ການປະເມີນລະບົບການສຶກສາເຕັກນິກ ແລະ ວິຊາຊີບໃນໄລຍະຜ່ານມາ 151

## ລາຍການຮູບສະແດງ

ຮູບສະແດງ 1.1: ຜະລິດຕະພາບແຮງງານໃນຂະແໜງກະສິກຳ, ອຸດສາຫະກຳ ແລະ ການບໍລິການ, ປີ 1995 ແລະ 2005 4
ຮູບສະແດງ 2.1: ອັດຕາສ່ວນຂອງພົນລະເມືອງ ຢູ່ລຸ່ມເສັ້ນຄວາມທຸກຍາກ ຂອງ ສປປ ລາວ, ແບ່ງຕາມພາກ ແລະ ປີ. 15
ຮູບສະແດງ 2.2: ອັດຕາການຮູ້ໜັງສືຂອງພົນລະເມືອງທີ່ມີອາຍຸ 15 ປີ ແລະ ສູງກວ່າ 15 ປີ ແບ່ງຕາມເພດ ໃນປີ 1995 ແລະ 2005 19
ຮູບສະແດງ 2.3: ອັດຕາການຮູ້ໜັງສື ຂອງພົນລະເມືອງ ທີ່ມີອາຍຸ 15 ປີ ແລະ ສູງກວ່າແບ່ງຕາມໝວດພາສາ ແລະ ເພດ ໃນປີ 2005 20
ຮູບສະແດງ 2.4: ອັດຕາສ່ວນຂອງປະຊາກອນຮູ້ໜັງສື ທີ່ຫາກໍ່ເຂົ້າມາຢູ່ໃນແຕ່ລະກຸ່ມອາຍຸທີ່ກ່ຽວຂ້ອງຕໍ່ປະຊາກອນທີ່ຫາກໍ່ເຂົ້າມາຢູ່ໃນແຕ່ລະກຸ່ມອາຍຸທີ່ກ່ຽວຂ້ອງ (LANERAG/NERAG) ປີ 1995-2005, ແບ່ງຕາມ ແຂວງ ແລະ ເພດ 21
ຮູບສະແດງ 2.5: ອັດຕາສ່ວນຂອງໂຮງຮຽນມູນລະປະຖົມ ແລະ ອັດຕາການປະລະໂຮງຮຽນປະຖົມ ແບ່ງຕາມ ແຂວງ, ໃນສົກຮຽນ 2004-2005 23
ຮູບສະແດງ 2 6: ອັດຕາສ່ວນຂອງບ້ານທີ່ເຂົ້າເຖິງນ້ຳສະອາດ ແລະ ປອດໄພໃນແຕ່ລະແຂວງ ໃນປີ 2005. 24
ຮູບສະແດງ 2.7: ອັດຕາການຕາຍຂອງເດັກແດງໃນປີ 1995 ແລະ ປີ 2005 ໃນແຕ່ລະແຂວງ 27
ຮູບສະແດງ 2.8: ຄ່າດັດຊະນີການພັດທະນາມະນຸດ ສະເພາະແຕ່ລະແຂວງ, ລະຫວ່າງປີ 2003-2005 28
ຮູບສະແດງ 2.9: ດັດຊະນີການພັດທະນາບົດບາດຍິງ-ຊາຍ ແລະ ການພັດທະນາມະນຸດໃນແຂວງຕ່າງໆ, ປີ 2003- 2005 29
ຮູບສະແດງ 2.10: ດັດຊະນີຄວາມທຸກຍາກຂອງມະນຸດ ສຳລັບແຂວງຕ່າງໆ ປີ 2003-2005 32
ຮູບສະແດງ 3.1: ອັດຕາສ່ວນແຮງງານແຈກຢາຍຕາມຂະແໜງການໃນປີ 1995 ແລະ 2005 41
ຮູບສະແດງ 3.2: ອັດຕາສ່ວນປະຊາກອນ ທີ່ເຂົ້າສູ່ກຳລັງແຮງງານ ແຈກຢາຍຕາມຂະແໜງການ ແລະ ເພດລະຫວ່າງປີ 1995 ແລະ ປີ 2005 42
ຮູບສະແດງ 3.3: ອັດຕາສ່ວນແຮງງານເຮັດວຽກໃນຂະແໜງທີ່ບໍ່ແມ່ນກະສິກຳໃນແຕ່ລະແຂວງ ໃນປີ 2005 44
ຮູບສະແດງ 3.4: ອັດຕາສ່ວນແຮງງານ ແຈກຢາຍຕາມກຸ່ມອຸດສາຫະກຳໃນຂະແໜງທີ່ບໍ່ແມ່ນກະສິກຳແບບຄອບຄົວ (2005-2006) 47
ຮູບສະແດງ 3.5: ອັດຕາສ່ວນແຮງງານ ແຈກຢາຍຕາມກຸ່ມຍ່ອຍ ໃນຂະແໜງອຸດສາຫະກຳປຸງແຕ່ງ, 2005- 2006 49
ຮູບສະແດງ 3.6: ອັດຕາສ່ວນແຮງງານແຈກຢາຍຕາມກຸ່ມຍ່ອຍໃນຂະແໜງບໍລິການ, ປີ 2005-2006 53
ຮູບສະແດງ 3.7: ອັດຕາສ່ວນແຮງງານແຈກຢາຍຕາມລະດັບການສຶກສາ ສຳລັບແຕ່ລະເພດ, ປີ 2005 58
ຮູບສະແດງ 3.8: ອັດຕາສ່ວນແຮງງານເຮັດວຽກ ໃນຂະແໜງການທີ່ບໍ່ແມ່ນກະສິກຳ ແຈກຢາຍຕາມລະດັບການສຶກສາໃນແຕ່ລະຂະແໜງການ, ປີ 2006 59
ຮູບສະແດງ 3.9: ອັດຕາສ່ວນແຮງງານເຮັດວຽກໃນຂະແໜງການທີ່ບໍ່ແມ່ນກະສິກຳ ແຈກຢາຍຕາມຂະໜາດຫົວໜ່ວຍທຸລະກິດ, ປີ 2006 59

# ສາລະບານ


ຮູບສະແດງ 3.10: ອັດຕາສ່ວນແຮງງານ ແຈກຢາຍຕາມຂະໜາດຫົວໜ່ວຍທຸລະກິດ ໃນແຕ່ລະຂະແໜງການຍ່ອຍຂອງ ຂະແໜງການ ທີ່ບໍ່ແມ່ນກະສິກຳ (NFEE) 60
ຮູບສະແດງ 4.1: ອັດຕາສ່ວນແຮງງານ ແຈກຢາຍຕາມສະພາບການເຮັດວຽກປົກກະຕິ, ໃນແຕ່ລະປະເພດແຮງງານ 72
ຮູບສະແດງ 4.2: ອັດຕາສ່ວນແຮງງານຮັບຈ້າງທົ່ວໄປ ແຈກຢາຍຕາມສະພາບການເຮັດວຽກປົກກະຕິໃນແຕ່ລະປະເພດຂອງບ້ານ 73
ຮູບສະແດງ 4.3: ອັດຕາສ່ວນມື້ເຮັດວຽກແຈກຢາຍຕາມສະພາບປະຈຸບັນຂອງວຽກໃນແຕ່ລະລະດູການ 75
ຮູບສະແດງ 4.4: ເສັ້ນສະແດງຈຳນວນວຽກສະເລ່ຍໃນໜຶ່ງອາທິດ (ຕາມສະພາບວຽກປະຈຸບັນ) ແບ່ງຕາມສີ່ກຸ່ມລາຍຮັບ ໃນແຕ່ລະລະດູການ 79
ຮູບສະແດງ 4.5: ອັດຕາສ່ວນແຮງງານຫວ່າງງານຕໍ່ແຮງງານທັງໝົດ ແລະ ອັດຕາສ່ວນມື້ເຮັດວຽກທີ່ມີການຫວ່າງງານ ຕໍ່ກັບມື້ເຮັດວຽກທັງໝົດ. (ມື້ທີ່ມີການເຮັດວຽກ ແລະ ມື້ທີ່ສາມາດເຮັດວຽກໄດ້ໃນແຕ່ລະ ລະດູການ) 80
ຮູບສະແດງ 4.6: ອັດຕາສ່ວນມື້ຫວ່າງງານຕາມສະພາບປະຈຸບັນຕໍ່ມື້ເຮັດວຽກທັງໝົດແບ່ງຕາມສີ່ກຸ່ມລາຍຮັບໃນແຕ່ລະລະດູການ 82
ຮູບສະແດງ 4.7: ເສັ້ນສະແດງອັດຕາສ່ວນມື້ຫວ່າງງານຕາມສະພາບປະຈຸບັນຕໍ່ມື້ເຮັດວຽກທັງໝົດແບ່ງຕາມກຸ່ມອາຍຸ ໃນແຕ່ລະດູການ. 83
ຮູບສະແດງ 4.8: ການວັດແທກການຫວ່າງງານຕາມຫຼັກເກນຕ່າງໆ 84
ຮູບສະແດງ 4.9: ເສັ້ນສະແດງລາຍຮັບສະເລ່ຍຕໍ່ຫົວຄົນຕາມອັດຕາການເອື່ອຍອີງທາງດ້ານເສດຖະກິດ 89
ຮູບສະແດງ 4.10: ອັດຕາສ່ວນຂອງແຕ່ລະແຫຼ່ງລາຍຮັບທີ່ປະກອບເຂົ້າເປັນລາຍຮັບທັງໝົດຂອງຄົວເຮືອນ 90
ຮູບສະແດງ 4.11: ເສັ້ນສະແດງຈຳນວນແຫຼ່ງລາຍຮັບ ແລະ ດັດຊະນີການປູກພືດຫຼາຍຊະນິດແບ່ງຕາມລາຍ ຮັບສະເລ່ຍຕໍ່ຫົວຄົນຂອງຄົວເຮືອນ 91
ຮູບສະແດງ 4.12: ອັດຕາສ່ວນຄົວເຮືອນແຈກຢາຍຕາມຄຳຕອບຂອງເຂົາເຈົ້າກ່ຽວກັບເຄື່ອງປ່າຂອງດົງຊະນິດຕ່າງໆ ທີ່ມີໃນປະຈຸບັນທຽບກັບໄລຍະ 5 ປີກ່ອນ 92
ຮູບສະແດງ 4.13: ອັດຕາສ່ວນຄົວເຮືອນແຈກຢາຍຕາມສີ່ກຸ່ມລາຍຮັບໃນແຕ່ລະປະເພດບ້ານ-ຂະໜາດຂອງເນື້ອທີ່ດິນກະສິກຳ 94
ຮູບສະແດງ 4.14: ເສັ້ນສະແດງການສະສົມທຶນມະນຸດຄິດໄລ່ຕາມຫົວຄົນຕໍ່ຄົວເຮືອນແບ່ງຕາມສີ່ກຸ່ມລາຍຮັບ 95
ຮູບສະແດງ 5.1: ອັດຕາສ່ວນແຮງງານແຈກຢາຍຕາມຊ່ອງທາງທີ່ເຂົາເຈົ້າເຂົ້າສູ່ຕະຫຼາດແຮງງານໃນແຕ່ລະ ປະເພດແຮງງານ 111
ຮູບສະແດງ 5.2: ອັດຕາສ່ວນຂອງແຮງງານແຈກຢາຍຕາມເຫດຜົນການປ່ຽນວຽກ 114
ຮູບສະແດງ 5.3: ອັດຕາສ່ວນຂອງແຮງງານແຈກຢາຍຕາມລະດັບການປ່ຽນແປງຂອງລາຍຮັບທີ່ໄດ້ໃນລະ ຫວ່າງການເຮັດວຽກໃນເມື່ອກ່ອນ ແລະ ປະຈຸບັນ 115
ຮູບສະແດງ 5.4: ອັດຕາສ່ວນຂອງແຮງງານໃນແຕ່ລະຄຸນລັກສະນະ ແບ່ງຕາມຄວາມຮູ້ສຶກຕໍ່ຄວາມໝັ້ນຄົງໃນວຽກ 117
ຮູບສະແດງ 5.5: ອັດຕາສ່ວນຂອງແຮງງານທີ່ຮູ້ສຶກວ່າມີການເຮັດວຽກບໍ່ເຕັມເວລາມາດຕະຖານ ແບ່ງຕາມ ຄຸນລັກສະນະ 117
ຮູບສະແດງ 5.6: ອັດຕາສ່ວນຂອງຜູ້ຕອບຄຳຖາມຕ່າງໆກ່ຽວກັບສິ່ງອຳນວຍຄວາມສະດວກ ແລະ ສິດທິຂອງແຮງງານ 123
ຮູບສະແດງ 5.7: ລາຍຮັບຕໍ່ຊົ່ວໂມງຂອງແຮງງານຮັບຈ້າງ (ກີບ/ຊົ່ວໂມງ) ໃນແຕ່ລະກຸ່ມຍ່ອຍຕ່າງໆ 124
ຮູບສະແດງ 5.8: ອັດຕາສ່ວນຂອງແຮງງານທີ່ຮູ້ສຶກວ່າຕົນເອງມີລາຍຮັບໝັ້ນຄົງ ຕາມຄຸນລັກສະນະຂອງ ວຽກ 124
ຮູບສະແດງ 7.1: ແຜນວາດທາງເລືອກທາງດ້ານນະໂຍບາຍເພື່ອປັບປຸງວຽກເຮັດງານທຳ ແລະ ເງື່ອນໄຂການເຮັດວຽກ ໃຫ້ແກ່ການພັດທະນາມະນຸດ 166

# ສາລະບານ

## ລາຍການຕາຕະລາງ


| | | |
|---|---|---|
| ຕາຕະລາງ 2.1: | ອັດຕາສ່ວນຂອງປະຊາຊົນທີ່ຢູ່ຕ່ຳກວ່າເສັ້ນຄວາມທຸກຍາກ ແລະ ອັດຕາການປ່ຽນແປງ, 1992/1993 - 2002/2003, ເຂດຊົນນະບົດ | 16 |
| ຕາຕະລາງ 2.2: | ອັດຕາການຮູ້ໜັງສື ໃນປີ 1995 ແລະ ການປ່ຽນແປງໃນອັດຕາການຮູ້ໜັງສື ໃນໄລຍະປີ 1995-2005 ຂອງພົນລະເມືອງທີ່ມີອາຍຸ 15 ປີ ແລະ ສູງກວ່າ 15 ປີ ແບ່ງຕາມແຂວງ | 20 |
| ຕາຕະລາງ 2.3: | ການຈັດລຳດັບຂອງປະເທດໃນກຸ່ມອາຊຽນຕາມດັດຊະນີ HDI, GDI ແລະ HPI | 26 |
| ຕາຕະລາງ 2 4: | ການຈັດລຳດັບແຂວງຕ່າງໆຕາມດັດຊະນີການພັດທະນາມະນຸດໃນປີ 1995 ແລະ 2005 | 30 |
| ຕາຕະລາງ 3.1: | ການແຈກຢາຍແຂວງຕາມອັດຕາການປ່ຽນແປງໃນອາຊີບ ທີ່ບໍ່ແມ່ນກະສິກຳ ຕໍ່ອາຊີບທັງໝົດໃນໄລຍະປີ 1995-2005 | 45 |
| ຕາຕະລາງ 3.2: | ຄ່າຄວາມຍືດຫົດຂອງການຈ້າງງານຕໍ່ການຜະລິດ, ຕາມຂະແໜງການລວມ ປີ 1995 -2006 | 47 |
| ຕາຕະລາງ 4.1: | ອັດຕາສ່ວນນີ້ເຮັດວຽກແຈກຢາຍຕາມສະພາບປະຈຸບັນຂອງວຽກໃນແຕ່ລະລະດູການຂອງແຮງງານ ທີ່ມາຈາກກຸ່ມຊົນເຜົ່າຕາມໝວດພາສາຕ່າງໆ | 76 |
| ຕາຕະລາງ 4.2: | ອັດຕາສ່ວນນີ້ເຮັດວຽກຕາມສະພາບປະຈຸບັນຂອງວຽກງານໃນແຕ່ລະດູການ ແລະ ປະເພດບ້ານ | 77 |
| ຕາຕະລາງ 4.3: | ຂອບເຂດການປ່ຽນວຽກງານຂອງແຮງງານໃນໜຶ່ງອາທິດແບ່ງຕາມສະພາບຂອງວຽກໃນແຕລະດູການ | 78 |
| ຕາຕະລາງ 4.4: | ອັດຕາສ່ວນການຫວ່າງງານປະຈຸບັນຕາມສະພາບວຽກປົກກະຕິ ແລະ ຕາມປະເພດແຮງງານໃນແຕ່ລະລະດູການ | 81 |
| ຕາຕະລາງ 4.5: | ອັດຕາສ່ວນການຫວ່າງງານແບ່ງຕາມປະເພດບ້ານ ແລະ ຊົນເຜົ່າໃນແຕ່ລະ ລະດູການ | 83 |
| ຕາຕະລາງ 4.6: | ຄາດຄະເນການຫວ່າງງານຕາມຫຼັກເກນຕ່າງໆ | 87 |
| ຕາຕະລາງ 4.7: | ລາຍຮັບສະເລ່ຍຕໍ່ຫົວຄົນຕໍ່ປີຂອງຄົວເຮືອນແບ່ງຕາມປະເພດບ້ານ ແລະ ກຸ່ມຊົນເຜົ່າ | 88 |
| ຕາຕະລາງ 4.8: | ອັດຕາສ່ວນຂອງລາຍຮັບທີ່ໄດ້ມາຈາກວຽກນອກຂະແໜງກະສິກຳຢູ່ແຕ່ລະປະເພດບ້ານ | 88 |
| ຕາຕະລາງ 4.9: | ຄ່າຂອງສຳປະສິດຈີນີຂອງຄວາມບໍ່ສະເໝີພາບສຳລັບແຕ່ລະປະເພດບ້ານ | 89 |
| ຕາຕະລາງ 4.10: | ອັດຕາສ່ວນຂອງຄົວເຮືອນທີ່ບອກເຖິງລະດັບການມີເຂົ້າກິນພຽງພໍໃນແຕ່ລະປະເພດບ້ານ | 90 |
| ຕາຕະລາງ 4.11: | ອັດຕາສ່ວນຄົວເຮືອນແຈກຢາຍຕາມຂະໜາດທີ່ດິນ ແລະ ປະເພດທີ່ດິນແບ່ງປັນໃນແຕ່ລະປະເພດບ້ານ | 94 |
| ຕາຕະລາງ 4.12: | ຄວາມຂາດແຄນທຶນມະນຸດໃນແຕ່ລະປະເພດບ້ານ ແລະ ກຸ່ມຊົນເຜົ່າ | 96 |
| ຕາຕະລາງ 5.1: | ການແຈກຢາຍອັດຕາສ່ວນຂອງແຮງງານ ແລະ ພໍ່ແມ່ຂອງແຮງງານຕາມອາຊີບຂອງເຂົາເຈົ້າ | 112 |
| ຕາຕະລາງ 5.2: | ອັດຕາສ່ວນຂອງແຮງງານແຈກຢາຍຕາມສະຖານະພາບວຽກງານ, ອຸດສາຫະກຳ ແລະ ອາຊີບໃນປະຈຸບັນ ແລະ ເມື່ອກ່ອນ | 113 |
| ຕາຕະລາງ 5.3: | ອັດຕາສ່ວນຂອງແຮງງານທີ່ເຄີຍປະສົບກັບການບໍ່ມີວຽກຢ່າງບໍ່ຕັ້ງໃຈໃນເວລາໃດໜຶ່ງໃນປີຜ່ານມາ | 115 |
| ຕາຕະລາງ 5 4: | ອັດຕາສ່ວນຂອງແຮງງານຮັບຈ້າງຕາມສະພາບທີ່ວ່າເຂົາເຈົ້າມີສັນຍາແຮງງານ ຫຼື ບໍ່ | 118 |
| ຕາຕະລາງ 5.5: | ອັດຕາສ່ວນຂອງແຮງານແບ່ງຕາມສະພາບແຮງງານເຈັບເປັນຍ້ອນເຮັດວຽກຫຼາຍຊົ່ວໂມງ ແລະ ສະພາບແວດລ້ອມການເຮັດວຽກບໍ່ດີ | 121 |
| ຕາຕະລາງ 5.6: | ລາຍຮັບຕໍ່ແຮງງານ-ສະເລ່ຍ | 125 |

# ຕົວຫຍໍ້

| | |
|---|---|
| ADB | ທະນາຄານພັດທະນາອາຊີ |
| ASEAN | ປະຊາຄົມອາຊີຕາເວັນອອກສຽງໃຕ້ (ອາຊຽນ) |
| BDS | ການບໍລິການດ້ານການພັດທະນາທຸລະກິດ |
| CMR | ອັດຕາການຕາຍຂອງເດັກ |
| CD | ການພັດທະນາຊຸມຊົນ |
| DOS | ກົມສະຖິຕິ |
| DDD | ວຽກເປື້ອນເປິ, ຫຍຸ້ງຍາກ ແລະ ອັນຕະລາຍ |
| EC06 | ການສຳຫຼວດເສດຖະກິດທົ່ວປະເທດ ປີ 2006 |
| EDI | ດັດຊະນີການກະຈາຍແບບເທົ່າທຽມກັນ |
| FDI | ການລົງທຶນໂດຍກົງຂອງຕ່າງປະເທດ |
| GDI | ດັດຊະນີການພັດທະນາບົດບາດຍິງ-ຊາຍ |
| GEM | ການວັດແທກຄວາມເຂັ້ມແຂງດ້ານບົດບາດຍິງ-ຊາຍ |
| GTZ | ອົງການຕົວແທນຂອງເຢຍລະມັນ ເພື່ອການຮ່ວມມືທາງດ້ານເຕັກນິກ |
| GOL | ລັດຖະບານແຫ່ງ ສປປ ລາວ |
| GDP | ລວມຍອດຜະລິດຕະພັນພາຍໃນ |
| GRID | ສູນພັດທະນາ ແລະ ສະໜອງຂໍ້ມູນຂ່າວສານບົດບາດຍິງ-ຊາຍ |
| HACCP | ການວິໄຈຄວາມສ່ຽງ ແລະ ເຂດຄວບຄຸມສຳຄັນ |
| HD | ການພັດທະນາມະນຸດ |
| HDI | ດັດຊະນີການພັດທະນາມະນຸດ |
| HDR | ບົດລາຍງານການພັດທະນາມະນຸດ |
| HPI | ດັດຊະນີຄວາມທຸກຍາກຂອງມະນຸດ |
| HRD | ການພັດທະນາຊັບພະຍາກອນມະນຸດ |

# ຕົວຫຍໍ້

| | |
|---|---|
| ILO | ອົງການແຮງງານສາກົນ |
| IMR | ອັດຕາການຕາຍຂອງເດັກແດງ |
| IOM | ອົງການສາກົນເພື່ອການເຄື່ອນຍ້າຍແຮງງານ |
| ISO | ອົງການສາກົນເພື່ອການຈັດມາດຕະຖານ |
| LANERAG | ການຮູ້ໜັງສືຂອງປະຊາກອນຜູ້ທີ່ຫາກໍ່ເຂົ້າມາຢູ່ໃນແຕ່ລະກຸ່ມອາຍຸທີ່ກ່ຽວຂ້ອງ |
| LECS | ການສຳຫຼວດການໃຊ້ຈ່າຍ ແລະ ການຊົມໃຊ້ຂອງຄົວເຮືອນລາວ |
| LI | ລາຍຮັບຕ່ຳ |
| LMIS | ລະບົບຂໍ້ມູນຂ່າວສານຕະຫຼາດແຮງງານ |
| LWU | ສະຫະພັນແມ່ຍິງລາວ |
| M&E | ການຕິດຕາມກວດກາ ແລະ ການປະເມີນຜົນ |
| MDG | ເປົ້າໝາຍການພັດທະນາສະຫະສະວັດ |
| MFA | ຂໍ້ຕົກລົງກ່ຽວກັບແຜ່ນແພ ແລະ ເຄື່ອງຕັດຫຍິບ |
| MICS | ການສຳຫຼວດເພື່ອຈັດກຸ່ມບັນດາຕົວຊີ້ບອກຫຼາຍປະເພດ |
| MMR | ອັດຕາການຕາຍຂອງແມ່ |
| MOE | ກະຊວງສຶກສາທິການ |
| MOLSW | ກະຊວງແຮງງານ ແລະ ສະຫວັດດີການສັງຄົມ |
| MPI | ກະຊວງແຜນການ ແລະ ການລົງທຶນ |
| NAR | ອັດຕາການມາໂຮງຮຽນສຸດທິ |
| NEM | ກົນໄກເສດຖະກິດໃໝ່ |
| NER | ອັດຕາເຂົ້າຮຽນສຸດທິ |
| NERAG | ປະຊາກອນຜູ້ທີ່ຫາກໍ່ເຂົ້າມາຢູ່ໃນແຕ່ລະກຸ່ມອາຍຸທີ່ກ່ຽວຂ້ອງ |
| NERI | ສະຖາບັນຄົ້ນຄວ້າເສດຖະກິດແຫ່ງຊາດ |

# ຕົວຫຍໍ້

| | |
|---|---|
| NESRS | ຍຸດທະສາດການປະຕິຮູບການສຶກສາແຫ່ງຊາດ |
| NFEE | ວິສາຫະກິດທີ່ບໍ່ແມ່ນກະສິກຳ |
| NGO | ອົງການຈັດຕັ້ງບໍ່ແມ່ນລັດຖະບານ |
| NGPES | ຍຸດທະສາດການເຕີບໂຕ ແລະ ລຶບລ້າງຄວາມທຸກຍາກແຫ່ງຊາດ |
| NHDR | ບົດລາຍງານການພັດທະນາມະນຸດແຫ່ງຊາດ |
| NSEDP | ແຜນພັດທະນາເສດຖະກິດສັງຄົມແຫ່ງຊາດ |
| NTFP | ເຄື່ອງປ່າຂອງດົງ |
| OTH | ວຽກອື່ນໆ |
| OFW | ແຮງງານຕ່າງດ້າວຟີລິປິນ |
| SE | ການປະກອບອາຊີບອິດສະຫຼະ |
| SME | ວິສາຫະກິດຂະໜາດນ້ອຍ ແລະ ຂະໜາດກາງ |
| SEZ | ເຂດເສດຖະກິດພິເສດ |
| TVE | ການສຶກສາເຕັກນິກ ແລະ ວິຊາຊີບ |
| TV | ໂທລະພາບ |
| TDRI | ສະຖາບັນວິໄຈເພື່ອການພັດທະນາຂອງໄທ |
| U | (ແຮງງານ) ທີ່ຫວ່າງງານ |
| UFW | ແຮງງານໃນຄອບຄົວທີ່ບໍ່ໄດ້ຮັບຄ່າຈ້າງ |
| UNDP | ອົງການສະຫະປະຊາຊາດເພື່ອການພັດທະນາ |
| VDF | ກອງທຶນພັດທະນາບ້ານ |
| W | (ແຮງງານ) ທີ່ຕ້ອງການເຮັດວຽກ |
| WE | ແຮງງານທີ່ໄດ້ຄ່າຈ້າງ (ໝາຍເຖິງຄົນຮັບຈ້າງທົ່ວໄປ) |
| WFP | ອົງການອາຫານໂລກ |

# ຄຳອະທິບາຍຄຳສັບສະເພາະ

1. **ແບບສັງຄົມກະສິກຳ:** ແມ່ນວິຖີການດຳລົງຊີວິດຂອງສັງຄົມ ທີ່ອາໄສການນຳໃຊ້ທີ່ດິນ ແລະ ຊັບພະຍາກອນທຳມະຊາດ ກ່ອນຫັນໄປສູ່ການຜະລິດແບບອຸດສາຫະກຳ (ນອນຢູ່ໃນຂະບວນ ກຳນົດດ້ານພາລະບົດບາດ ຂອງບຸກຄົນ ແລະ ຊັບພະຍາກອນ ພ້ອມດ້ວຍ ການກຳນົດດ້ານການຈັດຕັ້ງ). ອີກດ້ານໜຶ່ງ ກໍ່ຈະເຫັນວ່າ ສັງຄົມກະສິກຳ ນຳໃຊ້ເຕັກໂນໂລຊີ, ການຜະລິດ ແລະ ຊັບພະຍາກອນ ແບບປະຖົມປະຖານ/ເໝາະສົມ ແລະ ລາຍຮັບຂອງປະຊາຊົນໃນສັງຄົມນັ້ນກໍ່ມີສະພາບສົມບູນດີ.

2. **ການເຊື່ອມສານແບບປະຖົມປະຖານ ແລະ ແບບທັນສະໄໝ:** ແມ່ນການດຳເນີນກິດຈະກຳເສດຖະກິດເຊື່ອມສານເຂົ້າກັບກິດຈະກຳຫຼັກໃດໜຶ່ງ (ຕົວຢ່າງ ໂຄງການຂຸດຄົ້ນບໍ່ແຮ່) ເຊັ່ນ: ການປຸງແຕ່ງແຮ່ທາດ (ການເຊື່ອມສານແບບທັນສະໄໝ) ຫຼື ການສະໜອງປັດໄຈດ້ານການບໍລິການໃຫ້ແກ່ກິດຈະກຳຂຸດຄົ້ນບໍ່ແຮ່ (ການເຊື່ອມສານແບບປະຖົມປະຖານ).

3. **ວຽກຮັບຈ້າງທົ່ວໄປ:** ແມ່ນວຽກທີ່ເຮັດເພື່ອເອົາຄ່າຈ້າງໃນໄລຍະສັ້ນ. ສ່ວນໃຫຍ່ຈະໝາຍເຖິງວຽກທີ່ໃຊ້ສີມືແຮງງານຕ່ຳ ຫຼື ບໍ່ຕ້ອງການສີມືໃນຂະແໜງກະສິກຳ.

4. **ວຽກຕາມສະພາບປົກກະຕິ:** ແມ່ນວຽກທີ່ບຸກຄົນເຮັດຢູ່ໃນປະຈຸບັນ ຫຼື ໄດ້ເຮັດຜ່ານມາບໍ່ດົນ ເປັນວຽກຂະແໜງການ ເຊັ່ນ: ກະສິກຳ, ການຄ້າ ແລະ ລະດັບຄວາມສາມາດຂອງແຮງງານ (ເຊັ່ນ: ເປັນແຮງງານທີ່ປະກອບອາຊີບອິດສະຫຼະ, ເປັນແຮງງານຮັບຈ້າງ).

5. **ວຽກດີ:** ສ່ວນໃຫຍ່ໝາຍເຖິງວຽກທີ່ປະຕິບັດໄດ້ຕາມມາດຕະຖານຕ່າງໆ ເຊັ່ນ: ມາດຕະຖານທາງດ້ານຄຸນນະ ພາບຂອງວຽກ, ລາຍຮັບ, ເງື່ອນໄຂທາງດ້ານສຸຂະພາບ, ການຫຼີກຫຼ່ຽງການໃຊ້ແຮງງານເດັກ ແລະ ອື່ນໆ), ຜົນປະໂຫຍດຈາກການປະກັນສັງຄົມ, ເປັນວຽກທີ່ມີການປຶກສາຫາລື ລະຫວ່າງ ແຮງງານ, ນາຍຈ້າງ ແລະ ລັດຖະບານ. ຄຳດັ່ງກ່າວ ອາດມີຄວາມໝາຍແຕກຕ່າງກັນໄປຕາມເນື້ອໃນຂອງບົດ.

6. **ການມີວຽກເຮັດງານທຳ:** ໝາຍເຖິງການທີ່ບຸກຄົນເຂົ້າໄປເຮັດກິດຈະກຳໃດໜຶ່ງ ທີ່ມີຄວາມໝາຍທາງດ້ານເສດຖະກິດ. ບຸກຄົນດັ່ງກ່າວອາດແມ່ນຜູ້ທີ່ປະກອບອາຊີບອິດສະຫຼະຫຼືແມ່ນແຮງງານຮັບຈ້າງເພື່ອເອົາຄ່າຈ້າງຫຼືເງິນເດືອນ.ຄຳວ່າ"ວຽກ"ແລະ"ການມີວຽກເຮັດງານທຳ" ສາມາດໃຊ້ແທນກັນໄດ້.

7. **ທຶນມະນຸດ:** ໝາຍເຖິງລະດັບການສຶກສາ ແລະ ທັກສະສີມືທີ່ບຸກຄົນໃດໜຶ່ງມີ.

8. **ຄວາມເຂັ້ມແຂງທາງດ້ານມະນຸດ:** ໝາຍເຖິງທັກສະສີມື ແລະ ຄວາມສາມາດ ທີ່ບຸກຄົນມີຊຶ່ງລວມເຖິງ ແນວຄວາມຄິດລິເລີ່ມຕ່າງໆ.

9. **ບໍ່ເປັນທາງການ:** ສ່ວນໃຫຍ່ໝາຍເຖິງກິດຈະກຳທີ່ຢູ່ນອກກອບກົດໝາຍ (ຫຼື ລະບຽບການ). ການຂ້າມຊາຍແດນສາກົນ ເພື່ອໄປເຮັດວຽກຢູ່ຕ່າງປະເທດ ໂດຍບໍ່ມີໜັງສືຖືກຕ້ອງແມ່ນ "ການເຄື່ອນຍ້າຍແຮງງານໄປເຮັດວຽກແບບບໍ່ເປັນທາງການ". ການເຮັດວຽກຢູ່ໃນຂະແໜງການທີ່ມີກົດລະບຽບບໍ່ເຄັ່ງຄັດ ຫຼື ບໍ່ມີກົດລະບຽບ ເຊັ່ນ: ການຂາຍອາຫານໂດຍໃຊ້ລໍ້ຍູ້ຕ່າງໆ ກໍ່ແມ່ນການເຮັດວຽກໃນ "ຂະແໜງການນອກລະບົບ".

10. **ບໍ່ມີວຽກເຮັດ:** ຖ້າແຮງງານຜູ້ໜຶ່ງຫວ່າງງານໂດຍບໍ່ສະໝັກໃຈ ຖືວ່າແຮງງານຜູ້ນັ້ນບໍ່ມີວຽກເຮັດ.

11. **ເສດຖະກິດທີ່ເນັ້ນໜັກໃສ່ຄວາມຮູ້:** ໝາຍເຖິງເສດຖະກິດທີ່ຈະເລີນແລ້ວ ໂດຍທີ່ການຜະລິດອີງໃສ່ທັກສະຄວາມຮູ້ ແລະ ເຕັກໂນໂລຊີຫຼາຍກວ່າການໃຊ້ແຮງງານທາງດ້ານຮ່າງກາຍ.

12. **ການດຳລົງຊີວິດ:** ແມ່ນຂະບວນການທັງໝົດ ທີ່ກ່ຽວຂ້ອງກັບ ການທຳມາຫາກິນຂອງຄົວເຮືອນ. ຂະບວນການດັ່ງກ່າວ ບໍ່ໄດ້ຈຳກັດຢູ່ສະເພາະແຕ່ການສ້າງລາຍຮັບຈາກໜຶ່ງ ຫຼື ສອງກິດຈະກຳຕົ້ນຕໍເທົ່ານັ້ນ, ແຕ່ຫາກຍັງລວມເຖິງລາຍຮັບຈາກການຜະລິດໃຫ້ແກ່ຕົນເອງ,

# ຄຳອະທິບາຍຄຳສັບສະເພາະ

ການນຳໃຊ້ຊັບພະຍາກອນສ່ວນລວມ, ລາຍຮັບຈາກການໄປເຮັດວຽກຕ່າງປະເທດ, ການໂອນເງິນກັບບ້ານ ແລະ ອື່ນໆ ຂອງສະມາຊິກໃນຄົວເຮືອນ ນັ້ນໆ. ຄຳວ່າ "ການດຳລົງຊີວິດ" ສ່ວນໃຫຍ່ແມ່ນໃຊ້ກັບສັງຄົມທີ່ທຳການຜະລິດກະສິກຳ.

**13. ຫຼາຍໜ້າວຽກ:** ໝາຍເຖິງການເຮັດຫຼາຍກວ່າໜຶ່ງວຽກໃນເວລາດຽວກັນ. ຍົກຕົວຢ່າງ: ຄູສອນສອງວິຊາໃນເວລາດຽວກັນໃຫ້ແກ່ນັກຮຽນສອງກຸ່ມໃນຫ້ອງດຽວກັນ.

**14. ການກະຈາຍຄວາມຫຼາກຫຼາຍທາງດ້ານອາຊີບ:** ໝາຍເຖິງການຂະຫຍາຍຂອບເຂດຂອງກິດຈະກຳທາງດ້ານເສດຖະກິດຂອງກຳລັງແຮງງານ.

**15. ກິດຈະກຳນອກລະດູ/ບໍ່ແມ່ນກະສິກຳ:** ໝາຍເຖິງກິດຈະກຳ ຫຼື ວຽກທີ່ກ່ຽວຂ້ອງກັບກະສິກຳແຕ່ບໍ່ແມ່ນວຽກກະສິກຳ ເຊັ່ນ: ການປຸງແຕ່ງອາຫານ, ການຂົນສົ່ງສິນຄ້າກະສິກຳ, ການເປີດຮ້ານແປງລົດໂດຍສານ ແລະ ກິດຈະກຳອື່ນໆຢູ່ໃນບ້ານ. ກິດຈະກຳເຫຼົ່ານີ້ ເຮັດໃຫ້ຂອບເຂດວຽກຂອງຊາວກະສິກອນເພີ່ມຂຶ້ນ ແລະ ຂະຫຍາຍແຫຼ່ງລາຍຮັບຂອງເຂົາເຈົ້າໃຫ້ຫຼາຍຂຶ້ນ.

**16. ວຽກນອກຂະແໜງກະສິກຳ:** ໝາຍເຖິງວຽກຢູ່ນອກ ຫຼື ບໍ່ກ່ຽວຂ້ອງ ກັບຂະແໜງກະສິກຳ. ວຽກດັ່ງກ່າວ ອາດແມ່ນວຽກງານກໍ່ສ້າງ, ການສ້າງຖະໜົນຫົນທາງ, ວຽກຢູ່ໂຮງງານຕັດຫຍິບ ແລະ ອື່ນໆ ຊຶ່ງສ່ວນໃຫຍ່ມີຢູ່ໃນເມືອງໃຫຍ່ ແລະ ໃນຕົວເມືອງ.

**17. ວຽກຄ້າງຄາ:** ໝາຍເຖິງວຽກຍັງເຮັດບໍ່ແລ້ວ, ວຽກນ້ອຍ, ວຽກເສີມ ແລະ ວຽກບໍ່ປະຈຳ. ເມື່ອພິຈາລະນາໃນແງ່ຂອງວຽກດີນັ້ນ ຖືວ່າວຽກເຫຼົ່ານີ້ບໍ່ແມ່ນວຽກຕົ້ນຕໍໃນການດຳລົງຊີວິດຂອງຄົນ.

**18. ແຮງງານປະກອບອາຊີບອິດສະຫຼະ:** ແຮງງານມີບັນຊີເປັນຂອງຕົນເອງກໍ່ຍັງໝາຍເຖິງ ແຮງງານເຮັດວຽກ ໃຫ້ແກ່ຕົນເອງຄືກັນ. ແຮງງານຄືແນວນີ້ບໍ່ເຮັດວຽກໃຫ້ຜູ້ອື່ນ ເພື່ອຮັບຄ່າຈ້າງ ຫຼື ເງິນເດືອນ, ແຕ່ຈະສ້າງລາຍຮັບຈາກກິດຈະກຳ ຫຼື ວຽກຂອງຕົນເອງ (ເຊັ່ນ: ຊາວກະສິກອນທີ່ທຳການຜະລິດໃນດິນຂອງຕົນເອງ ຫຼື ຄົນຂາຍເຄື່ອງໃນຮ້ານຄ້າຂອງຕົນເອງ).

**19. ຄວາມຍືນຍົງ:** ໝາຍເຖິງ ຄວາມເປັນໄປໄດ້ ໃນການປະຕິບັດກິດຈະກຳທາງດ້ານເສດຖະກິດ, ສັງຄົມ ແລະ ກິດຈະກຳອື່ນໆ ທີ່ຄ້າຍຄືກັນ ໂດຍບໍ່ສົ່ງຜົນເສຍຫາຍຕໍ່ລະບົບນິເວດ, ບໍ່ເປັນອັນຕະລາຍຕໍ່ຊີວິດ ແລະ ການດຳລົງຊີວິດຂອງປະຊາຊົນ.

**20. ການຕົກທອດຄວາມທຸກຍາກ:** ແມ່ນສະພາບທີ່ບຸກຄົນ ຫຼື ນິຕິບຸກຄົນທຸກຍາກ ໄດ້ຖ່າຍໂອນພາລະຄວາມທຸກຍາກຂອງຕົນເອງໃຫ້ແກ່ຄົນອື່ນ. ຕົວຢ່າງ ຖ້າວ່າຄອບຄົວທຸກຍາກ ຫາກມອບຄວາມຮັບຜິດຊອບເດັກນ້ອຍ ຫຼື ລູກຫຼານຂອງຕົນໄປໃຫ້ສະມາຊິກຂອງຄອບຄົວຕົນເອງທີ່ບໍ່ຮັ່ງມີ ຫຼື ໃຫ້ຄອບຄົວອື່ນທີ່ທຸກຍາກ, ຄອບຄົວເຫຼົ່ານີ້ ກໍ່ຈະຕ້ອງຮັບພາລະເບິ່ງແຍງລ້ຽງດູເດັກນ້ອຍເຫຼົ່ານັ້ນ. ການເຮັດແນວນັ້ນຈະເຮັດໃຫ້ເຂົາເຈົ້າທຸກຍາກລົງອີກ.

**21. ການເຮັດວຽກບໍ່ເຕັມເວລາມາດຕະຖານ:** ແມ່ນສະພາບການເຮັດວຽກຂອງບຸກຄົນ ທີ່ບໍ່ໄດ້ເຮັດວຽກຢ່າງເຕັມທີ່ ແຕ່ເບິ່ງຄືກັບວ່າເຂົາເຈົ້າໄດ້ເຮັດວຽກເຕັມເວລາ.

**22. ແຮງງານຮັບຈ້າງ:** ແມ່ນແຮງງານທີ່ເຮັດວຽກໃຫ້ຄົນອື່ນຫຼືອົງກອນໃດໜຶ່ງເພື່ອເອົາຄ່າຈ້າງ. ແຮງງານຮັບຈ້າງສ່ວນໃຫຍ່ຈະເຮັດວຽກຕາມສັນຍາແຮງງານໄລຍະສັ້ນ (ສ່ວນໃຫຍ່ແມ່ນສັນຍາປາກເປົ່າ). ແຮງງານຮັບຈ້າງແຕກຕ່າງຈາກພະນັກງານປະຈຳ ເພາະວ່າ ພະນັກງານປະຈຳມີສັນຍາແຮງງານໄລຍະຍາວ ແລະ ໄດ້ຮັບເງິນເດືອນ ຫຼື ເງິນຕາມງວດຕ່າງໆ.

# ບົດສັງລວມຫຍໍ້

## ສ້າງຄວາມເຂັ້ມແຂງໃຫ້ແກ່ປະຊາຊົນໂດຍການສ້າງອາຊີບ ແລະ ຮູບແບບການດຳລົງຊີວິດທີ່ດີກວ່າ

## ພາກທີ 1: ບົດນຳ

### ຈຸດປະສົງ

ບົດລາຍງານສະບັບນີ້ ໄດ້ປະເມີນສະພາບວຽກເຮັດງານທຳ ແລະ ຮູບແບບການດຳລົງຊີວິດຂອງກຸ່ມຄົນດ້ອຍໂອກາດໃນສັງຄົມຂອງ ສປປ ລາວ ເພື່ອປັບປຸງນະໂຍບາຍທີ່ມີຢູ່ ແລະ ສະເໜີບາງນະໂຍບາຍໃໝ່ເພື່ອສ້າງ ແລະ ຂະຫຍາຍໂອກາດການມີວຽກເຮັດງານທຳໂດຍແນ່ໃສ່ເຮັດໃຫ້ຜູ້ອອກແຮງງານໄດ້ເຂົ້າຮ່ວມໃນການຈ້າງງານທົ່ວໄປຂອງສັງຄົມໃຫ້ໄດ້ຫຼາຍທີ່ສຸດ. ນອກຈາກຈະວິໄຈໃຫ້ເຫັນສະພາບລວມຂອງວຽກເຮັດງານທຳ ແລະ ສາຍພົວພັນຂອງການຈ້າງງານກັບການເຕີບໂຕຂອງເສດຖະກິດແລ້ວບົດລາຍງານສະບັບນີ້ຍັງຈະໄດ້ສຶກສາວິໄຈກ່ຽວກັບຜູ້ອອກແຮງງານສາມກຸ່ມຄື:

1. ປະຊາຊົນ ແລະ ແຮງງານໃນເຂດບ້ານຊົນນະບົດ,

2. ກຸ່ມແຮງງານທີ່ເຮັດວຽກໃນຂະແໜງວຽກທີ່ມີລາຍຮັບຕໍ່າໃນເຂດຕົວເມືອງ (ແຮງງານຮັບຈ້າງ ແລະ ແຮງງານປະກອບອາຊີບອິດສະຫຼະ ທີ່ບໍ່ໄດ້ຮັບການປົກປ້ອງຈາກກົດໝາຍ ເທົ່າທີ່ຄວນ); ແລະ

3. ແຮງງານລາວທີ່ໄປເຮັດວຽກຢູ່ປະເທດໄທ

### ເຫດຜົນຂອງການສຶກສາວິໄຈ

ສປປ ລາວ ເປັນປະເທດທີ່ມີລາຍຮັບຕໍ່າ ຊຶ່ງຫຼາຍກວ່າ 3/4 ຂອງຈຳນວນປະຊາກອນທັງໝົດ ທຳມາຫາລ້ຽງຊີບ ໂດຍການອາໄສທີ່ດິນເປັນຕົ້ນຕໍ. ຄວາມກົດດັນ ຈາກການເພີ່ມຂຶ້ນຂອງຈຳນວນປະຊາກອນ ແລະ ການເຊື່ອມໂຍງເສດຖະກິດ ແລະ ສັງຄົມກັບສາກົນເຮັດໃຫ້ຕ້ອງໄດ້ທົບທວນການນຳໃຊ້ທີ່ດິນ ແລະ ຊັບພະຍາກອນຄືນໃໝ່ ແລະ ເຮັດໃຫ້ມີການປ່ຽນແປງຮູບແບບການດຳລົງຊີວິດຂອງຊາວກະສິກອນ. ດັ່ງນັ້ນ, ຈຶ່ງເຮັດໃຫ້ ບັນຫາຈຳນວນໜຶ່ງມີໂອກາດເກີດຂຶ້ນໃນເຂດຊົນນະບົດເປັນຕົ້ນແມ່ນການສູນເສຍອາຊີບ, ຄວາມບໍ່ສະເໝີພາບ ແລະ ຄວາມທຸກຍາກ. ພ້ອມດຽວກັນນັ້ນ, ພົນລະເມືອງຈຳນວນເຄິ່ງໜຶ່ງ ກໍ່ຄືແຮງງານໃນເຂດຕົວເມືອງ ຊໍ້າພັດເຮັດວຽກທີ່ມີລາຍຮັບຕໍ່າເປັນສ່ວນໃຫຍ່ ແລະ ຍັງບໍ່ມີສະພາບເງື່ອນໄຂໃນການດຳລົງຊີວິດທີ່ໝັ້ນຄົງ. ເຖິງວ່າ ລະດັບຄວາມທຸກຍາກໃນເຂດຕົວເມືອງ ຈະຕໍ່າກວ່າເຂດຊົນນະບົດກໍ່ຕາມ, ແຕ່ໃນໄລຍະຜ່ານມາ ອັດຕາສ່ວນຂອງຄົນທຸກຍາກໃນເຂດຕົວເມືອງແມ່ນໄດ້ເພີ່ມຂຶ້ນ. ກຸ່ມແຮງງານທີ່ໄປເຮັດວຽກຢູ່ຕ່າງປະເທດ ໂດຍສະເພາະຢູ່ປະເທດໄທ ກຳລັງປະສົບກັບບັນຫາຄວາມບໍ່ແນ່ນອນ, ໄພຫວ່າງງານ ແລະ ບາງຄັ້ງກໍ່ຖືກກົດຂີ່ຂູດ ຮີດ. ການເຕົ້າໂຮມເອົາກຳລັງແຮງງານຈຳນວນຫຼວງຫຼາຍເຂົ້າສູ່ລະບົບການວ່າຈ້າງງານ ແລະ ຮັບປະກັນໃຫ້ ພວກເຂົາມີການດຳລົງຊີວິດທີ່ໝັ້ນຄົງດີແມ່ນບູລິມະສິດທີ່ມີຄວາມສຳຄັນສູງ ໃນແຜນການພັດທະນາ ຂອງລັດຖະບານເຮົາ. ດັ່ງນັ້ນ, ຈຶ່ງເຊື່ອວ່າການສຶກສາວິໄຈກ່ຽວກັບວຽກເຮັດງານທຳ ແລະ ຮູບແບບການດຳລົງຊີວິດໃນຄັ້ງນີ້ ແມ່ນໄດ້ຈັດຕັ້ງປະຕິບັດ ແລະ ດຳເນີນໄປໃນເວລາທີ່ເໝາະສົມ ແລະ ຄົງຈະເປັນປະໂຫຍດໃຫ້ແກ່ລັດຖະບານ ໃນການວາງແຜນ ແລະ ຈັດຕັ້ງປະຕິບັດນະໂຍບາຍໃນອະນາຄົດເປັນຕົ້ນແຜນການ 5 ປີຄັ້ງທີ VII ທີ່ ໃກ້ຈະມາເຖິງນີ້.

ການຄົ້ນຄວ້າວິໄຈບົດລາຍງານສະບັບນີ້ ແມ່ນໄດ້ດຳເນີນໄປພາຍໃຕ້ຄວາມໝັ້ນໃຈທີ່ວ່າ ການມີວຽກເຮັດງານທຳ ແລະ ການດຳລົງຊີວິດທີ່ໝັ້ນຄົງ ຈະຊ່ວຍປະກອບສ່ວນສ້າງຄວາມເຂັ້ມແຂງໃຫ້ແກ່ປະຊາຊົນ ແລະ ເຮັດໃຫ້ຄຸນນະພາບຊີວິດຂອງເຂົາເຈົ້າດີຂຶ້ນ. ພາກທີ 2 ຂອງບົດສັງລວມນີ້ ຈະສະເໜີກ່ຽວກັບ ສະພາບລວມຂອງແຮງງານຍິງ ແລະ ຊາຍຢູ່ໃນສະຖານທີ່ເຮັດວຽກ: ຄຸນນະພາບຂອງວຽກງານ, ແບບແຜນການດຳລົງຊີວິດ, ການຫວ່າງງານ ແລະ ມາດຕະຖານຊີວິດການເປັນຢູ່. ພາກທີ 3 ຈະນຳສະເໜີ ຂໍ້ສະເໜີແນະດ້ານນະໂຍບາຍເພື່ອເພີ່ມວຽກເຮັດງານທຳ ແລະ ໂອກາດກ້າວໄປຫາວຽກງານທີ່ມີຄຸນນະພາບໂດຍສະເພາະ ເພື່ອກຸ່ມຄົນທີ່ໄດ້ ກ່າວມາຂ້າງເທິງນັ້ນ.

## ພາກທີ 2: ຜົນການສຶກສາວິໄຈ

### ຜົນສຳເລັດຂອງການພັດທະນາ

#### ຜົນຄວາມຄືບໜ້າທີ່ເພິ່ງພໍໃຈໃນປະຈຸບັນ

ນັບຕັ້ງແຕ່ປະເທດເຮົາໄດ້ປະຕິບັດກົນໄກເສດຖະກິດໃໝ່ໃນປີ 1986 ເປັນຕົ້ນມາ ສັງເກດເຫັນວ່າ ການພັດທະນາເສດຖະກິດ ແລະ ສັງຄົມ ໄດ້ມີທ່າກ້າວຂະຫຍາຍໂຕດີເປັນທີ່ໜ້າເພິ່ງພໍໃຈ. ໃນໄລຍະ 2 ທົດສະວັດ ທີ່ຜ່ານມານີ້, ລະດັບອັດຕາການເຕີບໂຕທາງດ້ານ

ເສດຖະກິດ ໂດຍສະເລ່ຍແມ່ນ 6-7% ຕໍ່ປີ ຊຶ່ງໃນນັ້ນທຸກຂະແໜງການບໍ່ວ່າຈະເປັນ ຂະແໜງການກະສິກຳ, ອຸດສາຫະກຳ ແລະ ການບໍລິການ ຕ່າງກໍ່ເຕີບໃຫຍ່ຂະຫຍາຍໂຕຢ່າງແຂງແຮງ, ໃນນັ້ນເດັ່ນກວ່າໝູ່ກໍ່ແມ່ນ ຂະແໜງການອຸດສາຫະກຳ. ໃນຊຸມປີ 90, ຂະແໜງການຕັດຫຍິບ ກໍ່ມີການຂະຫຍາຍໂຕຢ່າງກ້າວກະໂດດ ແລະ ຖັດມາກໍ່ແມ່ນ ຂະແໜງການອຸດສາຫະກຳ ທີ່ນຳໃຊ້ຊັບພະຍາກອນທຳມະຊາດ ເຊັ່ນ: ຂະແໜງບໍ່ແຮ່ ແລະ ພະລັງງານໄຟຟ້ານ້ຳຕົກ. ອຸດສາຫະກຳເພື່ອການສົ່ງ ອອກ ເຊັ່ນ: ການຕັດຫຍິບ, ການທ່ອງທ່ຽວ ແລະ ຂະແໜງການກໍ່ສ້າງທີ່ເປັນຂະແໜງການຍູ້ໜູນໃຫ້ແກ່ຂະແໜງການເຫຼົ່ານີ້ກໍ່ໄດ້ຊ່ວຍຂະຫຍາຍພື້ນຖານດ້ານວຽກເຮັດງານທຳ ໄປຄຽງຄູ່ກັນກັບຂະແໜງການກະສິກຳໄດ້ເປັນຢ່າງດີ.

ເສດຖະກິດຂອງລາວເປັນເສດຖະກິດຂ້າມຜ່ານ ແລະ ກຳລັງມີການປ່ຽນແປງໄປເທື່ອລະກ້າວ. ການປ່ຽນແປງໃນລັກສະນະຄ່ອຍເປັນຄ່ອຍໄປຄືແນວນີ້ ໄດ້ຊ່ວຍຜ່ອນຄາຍບັນຫາຜົນກະທົບທີ່ຫຼາຍປະເທດ ເຄີຍໄດ້ປະສົບມາໃນຕອນຕົ້ນຂອງໃນໄລຍະຂ້າມຜ່ານໄປສູ່ເສດຖະກິດການຕະຫຼາດ. ສປປ ລາວ ໄດ້ມີການຮ່ວມມື 2 ຝ່າຍ ແລະ ຫຼາຍຝ່າຍ ແລະ ໄດ້ຮັບການຊ່ວຍເຫຼືອຈາກສາກົນຢ່າງຫຼວງຫຼາຍ. ເຖິງຢ່າງໃດກໍ່ຕາມ, ຈຳນວນອົງການຈັດຕັ້ງສາກົນທີ່ບໍ່ສັງກັດລັດຖະບານ ແລະ ອົງການຈັດຕັ້ງທາງສັງຄົມຍັງມີໜ້ອຍ. ລັດຖະບານເຮົາຮັບຮູ້ເຖິງ ຄວາມຈຳເປັນ ແລະ ກຳລັງພະຍາຍາມເອົາໃຈໃສ່ປັບປຸງສະພາບແວດລ້ອມເພື່ອເອື້ອອຳນວຍໃຫ້ແກ່ການຂະຫຍາຍການຮ່ວມມື.

ໃນຊຸມປີຜ່ານມາ, ອັດຕາການຮູ້ໜັງສືຂອງປະຊາຊົນລາວບັນດາເຜົ່າ ເພີ່ມຂຶ້ນຢ່າງເຫັນໄດ້ຈະແຈ້ງ ຊຶ່ງໃນນັ້ນ ອັດຕາການຮູ້ໜັງສືຂອງປະຊາຊົນໃນເກນອາຍຸ 15-25 ປີ ເພີ່ມຂຶ້ນເກືອບ 100%. ວຽກງານຂະແໜງການສາທາລະນະສຸກ ກໍ່ໄດ້ຮັບການພັດທະນາດີຂຶ້ນຫຼາຍ ເຊັ່ນວ່າ: ໃນໄລຍະປີ 1995 - 2005 ອັດຕາການຕາຍຂອງເດັກແດງຫຼຸດລົງຈາກ 104 ຄົນມາເປັນ 70 ຄົນຕໍ່ເດັກເກີດ 1000 ຄົນ ໂດຍສະເພາະຢູ່ໃນກຸ່ມເດັກນ້ອຍແມ່ຍິງ. ອັດຕາສ່ວນຂອງພົນລະເມືອງທີ່ທຸກຍາກ ໄດ້ຫຼຸດລົງຈາກ 46% ໃນປີ 1992-93 ມາເປັນ 26.7% ໃນ ປີ 2007-08 (ຕົວເລກຄາດຄະເນ) ຊຶ່ງຜົນສຳເລັດດັ່ງກ່າວ ສາມາດບັນລຸໄດ້ທັງໆທີ່ລາວເຮົາ ມີຫຼາຍຊົນເຜົ່າທີ່ດຳລົງຊີວິດຢູ່ແບບກະແຈກກະຈາຍຕາມເຂດພື້ນທີ່ຕ່າງໆ ລວມທັງເຂດຫ່າງໄກສອກຫຼີກ ທີ່ເດີນທາງເຂົ້າໄປ ຮອດໄປເຖິງຍາກ, ມີສຳນຽງ ແລະ ໃຊ້ພາສາປາກເວົ້າທ້ອງຖິ່ນໃຜມັນທີ່ແຕກຕ່າງກັນ. ລະດັບການສຶກສາ, ການບໍລິການທາງດ້ານສາທາລະນະສຸກ ແລະ ຄວາມທຸກຍາກໃນລະດັບແຂວງ ກໍ່ຍັງມີຄວາມແຕກໂຕນກັນ ຫຼາຍ ຊຶ່ງໃນປະຈຸບັນ ລັດຖະບານ ກຳລັງພະຍາຍາມຊອກຫາຊ່ອງທາງເພື່ອເຮັດໃຫ້ຊ່ອງຫວ່າງເຫຼົ່ານີ້ນ້ອຍລົງ.

## ... ແຕ່ສິ່ງທ້າທາຍກໍ່ຍັງຄົງມີຢູ່

ສປປ ລາວ ໄດ້ປະເຊີນກັບສິ່ງທ້າທາຍຕ່າງໆໃນດ້ານການສ້າງວຽກເຮັດງານທຳ ລວມທັງການຈ້າງງານ ແລະ ການທຳມາຫາກິນກໍ່ຄືການດຳລົງຊີວິດຂອງປະຊາຊົນທົ່ວໄປ.

1. ຊາວຜູ້ອອກແຮງງານໃນທົ່ວປະເທດ ຈຳນວນ 75% ຍັງສືບຕໍ່ຢຶດຖືການທຳມາຫາກິນ ທີ່ຕິດພັນກັບວຽກງານກະສິກຳຊຶ່ງບັນຫານີ້ ໄດ້ສ່ອງແສງໃຫ້ເຫັນວ່າ ການເຕີບໂຕຂອງເສດຖະກິດໃນ ໄລຍະຜ່ານມາ ຍັງບໍ່ທັນໄດ້ກະຕຸກຊຸກຍູ້ໃຫ້ເກີດມີວຽກເຮັດງານທຳຫຼາຍເທົ່າທີ່ຄວນ. ຜະລິດຕະ ພາບແຮງງານໃນຂະແໜງກະສິກຳ ຍັງຕ່ຳກວ່າ ຜະລິດຕະພາບແຮງງານໃນຂະແໜງການອື່ນໆ ເຖິງ 4-10 ເທົ່າ. ລະດັບຊີວິດການເປັນຢູ່ຂອງປະຊົນໃນເຂດຊົນນະບົດ ຍັງຕ່ຳກວ່າ ເຂດຕົວເມືອງ. ອັດຕາການສູນເສຍຊັບພະຍາກອນທຳມະຊາດ ແລະ ການເພີ່ມຂຶ້ນຂອງພົນລະເມືອງກຳລັງເປັນບັນຫາເຮັດໃຫ້ການທຳມາຫາກິນຂອງປະຊາຊົນ ໃນເຂດຊົນນະບົດ ມີຄວາມຝືດເຄືອງຫຼາຍຂຶ້ນ. ອັດຕາຄວາມທຸກຍາກໃນລະດັບປະເທດ ໄດ້ຫຼຸດລົງ ແຕ່ວ່າສາເຫດຂອງການຫຼຸດລົງດັ່ງກ່າວ ບໍ່ແມ່ນມາຈາກການສ້າງງານ. ຂະແໜງການທີ່ມີການຂະຫຍາຍຕົວແຮງ ແລະ ມີຜະລິດຕະພາບແຮງງານສູງ ຊ້ຳພັດບໍ່ໄດ້ສ້າງວຽກເຮັດງານທຳ ຫຼື ມີການຈ້າງງານຫຼາຍເທົ່າທີ່ຄວນ.

2. ຕົວຊີ້ບອກທາງດ້ານການພັດທະນາຫຼາຍຕົວ ໄດ້ສະແດງໃຫ້ເຫັນເຖິງຄວາມແຕກໂຕນກັນລະຫວ່າງເຂດຫ່າງໄກສອກຫຼີກໃນພາກເໜືອ ແລະ ພາກໃຕ້ (ພັດທະນາໜ້ອຍກວ່າ ແລະ ທຸກຍາກຫຼາຍກວ່າ), ແລະ ເຂດທີ່ເຊື່ອມຕໍ່ກັບແມ່ນ້ຳຂອງ ແລະ ເຂດໃຈກາງຂອງພາກຕາເວັນຕົກ (ພັດທະນາຫຼາຍກວ່າ-ທຸກຍາກໜ້ອຍກວ່າ). ອັດຕາຄວາມທຸກຍາກຂອງພົນລະເມືອງລາວຢູ່ທາງພາກເໜືອສູງກວ່າທາງພາກໃຕ້ 12%. 1/5 ຂອງຈຳນວນບ້ານທັງໝົດໃນທົ່ວປະເທດ ຍັງບໍ່ມີຖະໜົນຫົນທາງທີ່ສາມາດໄປມາຫາສູ່ກັນໄດ້ຕະຫຼອດລະດູການ, ການນຳໃຊ້ໄຟຟ້າຍັງຈະຕ້ອງໄດ້ຂະຫຍາຍໃຫ້ໄດ້ເຖິງ 40% ຂອງຈຳນວນຄົວເຮືອນທັງໝົດ. ພ້ອມກັນນັ້ນ, ກໍ່ຍັງຈະຕ້ອງໄດ້ເອົາໃຈໃສ່ປັບປຸງການຄົມມະນາຄົມທາງບົກໃຫ້ດີຂຶ້ນ. ເຂດຫ່າງໄກສອກຫຼີກຊຶ່ງເປັນເຂດທີ່ຢູ່ອາໄສຂອງປະຊາຊົນຫຼາຍຊົນເຜົ່າຍັງຖືກຕັດຂາດຈາກເຂດອື່ນໆຊຶ່ງສະແດງໃຫ້ເຫັນວ່າລະດັບການເຊື່ອມໂຍງຂອງປະຊາຊົນເຫຼົ່ານີ້ກັບຂະບວນການພັດທະນາລວມຍັງບໍ່ທັນສູງ.

3. ອີກປະການໜຶ່ງ, ກໍ່ຍັງເຫັນວ່າ ຕົວຊີ້ບອກກ່ຽວກັບການພັດທະນາມະນຸດຫຼາຍຕົວໃນລະດັບແຂວງ ມີການປ່ຽນແປງທີ່ແຕກຕ່າງກັນໄປ. ບາງຕົວຊີ້ບອກກໍ່ປ່ຽນແປງໄປໃນທາງລົບ (ຕົວຢ່າງລະດັບ ຄວາມທຸກຍາກໃນບາງແຂວງກໍ່ເພີ່ມຂຶ້ນ) ຊຶ່ງສະແດງໃຫ້ເຫັນວ່າ ການກະຈາຍຜົນປະໂຫຍດໃນ ຫຼາຍເຂດຂອງປະເທດຍັງມີຄວາມແຕກໂຕນກັນຢູ່.

4. ການພັດທະນາຂອງຂະແໜງອຸດສາຫະກຳ ເຮັດໃຫ້ຫຼາຍພາກສ່ວນຫັນໄປນຳໃຊ້ທີ່ດິນ ແລະ ຊັບພະຍາກອນທຳມະຊາດຫຼາຍຂຶ້ນ, ເຮັດໃຫ້ໂອກາດການນຳໃຊ້ເນື້ອທີ່ດິນ ແລະ ຊັບພະຍາກອນທຳມະຊາດຂອງຊາວກະສິກອນທີ່ເຄີຍເປັນຜູ້ນຳໃຊ້ຕົ້ນຕໍຖືກຈຳກັດ.

5. ທາງດ້ານສັງຄົມ, ລະດັບສະເລ່ຍປີການສຶກສາຂອງພົນລະເມືອງລາວແມ່ນ 3-4 ປີ. ໃນນັ້ນ, ລະດັບສະເລ່ຍປີການສຶກສາ ຂອງກຸ່ມຊົນເຜົ່າທີ່ຢູ່ຫ່າງໄກສອກຫຼີກ ແລະ ແມ່ຍິງແມ່ນຍັງຕ່ຳກວ່ານີ້ອີກ. ອັດຕາເຂົ້າຮຽນຊັ້ນປະຖົມຂອງເດັກນ້ອຍໃນຂອບເຂດທົ່ວປະເທດ ມີພຽງແຕ່ 68% ເທົ່ານັ້ນ, ແຕ່ສຳລັບອັດຕາເຂົ້າຮຽນຂອງເດັກນ້ອຍແມ່ຍິງ ກໍ່ຍິ່ງຕ່ຳກວ່ານັ້ນ. ດ້ານສາທາລະນະສຸກ, ເຖິງແມ່ນວ່າ ໃນໄລຍະປີ 1995-2005 ທີ່ຜ່ານມາອັດຕາການຕາຍຂອງເດັກແດງໃນທົ່ວປະເທດ ໄດ້ຫຼຸດລົງກໍ່ຕາມ ແຕ່ອັດຕາການຕາຍຂອງເດັກແດງ ໃນ 5 ແຂວງຊ້ຳພັດມີທ່າອ່ຽງເພີ່ມສູງຂຶ້ນ ຢ່າງໜ້າວິຕົກ. ອັດຕາເດັກນ້ອຍຂາດສານອາຫານ ມີສູງເຖິງ 50%. ອັນນີ້ກໍ່ແມ່ນບັນຫາໜຶ່ງອີກທີ່ໜ້າເປັນຫ່ວງເຊັ່ນດຽວກັນ. ພ້ອມກັນນັ້ນ, ພົນລະເມືອງລາວພຽງ 5% ເທົ່ານັ້ນທີ່ສາມາດໄດ້ ຊົມໃຊ້ນ້ຳດື່ມສະອາດ (ຢູ່ທາງ

ພາກເໜືອອັດຕາດັ່ງກ່າວແມ່ນຢູ່ໃນລະຫວ່າງ 10-20%).

## ສະພາບການວຽກເຮັດງານທຳ

### ປະຊາຊົນລາວຈຳນວນຫຼວງຫຼາຍຍັງເຮັດວຽກຢູ່ໃນຂະແໜງການກະສິກຳ

ໃນປີ 1995 ອັດຕາສ່ວນແຮງງານທີ່ນອນຢູ່ໃນຂະແໜງກະສິກຳ ແມ່ນມີສູງເຖິງ 85.4%. ເຖິງວ່າສ່ວນປະກອບຂອງຂະແໜງກະສິກຳ ໃນໂຄງປະກອບລວມຍອດຜະລິດຕະພັນພາຍໃນ (GDP) ຫຼຸດລົງຫຼາຍກວ່າເຄິ່ງໜຶ່ງກໍ່ຕາມ, ແຕ່ອັດຕາສ່ວນຂອງແຮງງານດັ່ງກ່າວ ກໍ່ຫຼຸດລົງພຽງແຕ່ 6.9% ຈາກ 85.4% ມາເປັນ 78.5%. ເຖິງວ່າອັດຕາການປ່ຽນວຽກ ໄປສູ່ວຽກທີ່ບໍ່ແມ່ນກະສິກຳ ຂອງແຮງງານແມ່ຍິງ (8%) ສູງກວ່າແຮງງານຜູ້ຊາຍ (5.5%), ແຕ່ອັດຕາສ່ວນຂອງແຮງງານແມ່ຍິງ ທີ່ເຮັດວຽກໃນຂະແໜງກະສິກຳ ກໍ່ຍັງມີສູງກວ່າອັດຕາສ່ວນຂອງແຮງງານຜູ້ຊາຍຢູ່. ຕາມຫຼັກການແລ້ວຄວນຈະໃຫ້ການສົ່ງເສີມການປ່ຽນວຽກຈາກຂະແໜງກະສິກຳໄປຫາຂະແໜງການອື່ນ, ແຕ່ໃນນີ້ກໍ່ບໍ່ໄດ້ໝາຍຄວາມວ່າ ທຸກໆວຽກໃນຂະແໜງທີ່ບໍ່ແມ່ນກະສິກຳ ຈະເປັນວຽກທີ່ດີກວ່າໝົດ. ບາງອາຊີບໃນຂະແໜງການທີ່ບໍ່ເປັນລະບົບໂດຍສະເພາະໃນຂະແໜງບໍລິການ ເປັນວຽກງານທີ່ມີຄວາມຫຍຸ້ງຍາກ ແລະ ໃຫ້ຜົນຕອບແທນຕ່ຳ.

ອັດຕາສ່ວນຂອງກຳລັງແຮງງານ ທີ່ນອນຢູ່ໃນຂະແໜງການທີ່ບໍ່ແມ່ນກະສິກຳ ຍັງບໍ່ຂະຫຍາຍຕົວເທົ່າທີ່ຄວນ. ອັດຕາສ່ວນການສ້າງວຽກເຮັດງານທຳ ໃນຂະແໜງອຸດສາຫະກຳ ມີພຽງແຕ່ 4.8% ຂອງຈຳນວນແຮງງານທັງໝົດ. ໃນນັ້ນ, ການສ້າງວຽກເຮັດງານທຳໃນຂະແໜງປຸງແຕ່ງມີ 3.9% (ສ່ວນຫຼາຍແມ່ນຂະແໜງປຸງແຕ່ງອາຫານ, ປຸງແຕ່ງໄມ້ ແລະ ຕັດຫຍິບ), ໃນຂະແໜງບໍ່ແຮ່ມີ 0.3%, ຂະແໜງໄຟຟ້າ (ລວມທັງນ້ຳປະປາ ແລະ ອາຍແກັດສ) ມີ 0.2% ແລະ ຂະແໜງກໍ່ສ້າງມີ 0.4%. ການຈ້າງງານໃນຂະແໜງບໍລິການມີ 16.7% ລວມ ທັງພາກລັດ (6.1%), ການຄ້າຂາຍຍົກ ແລະ ຂາຍຍ່ອຍ (4.9%), ແລະ ການສຶກສາ ແລະ ສາທາລະນະສຸກ (2.1%). ແຮງງານໜ້ອຍກວ່າເຄິ່ງໜຶ່ງຂອງຈຳນວນແຮງງານທັງໝົດໃນໄລຍະປີ 1995-2005 ໄດ້ຫັນປ່ຽນ ໄປເຮັດວຽກງານໃນຂະແໜງທີ່ບໍ່ແມ່ນກະສິກຳ. ແຮງງານໃນເຂດໃກ້ຄຽງກັບເທດສະບານແຂວງເຮັດວຽກທີ່ບໍ່ແມ່ນກະສິກຳໜ້ອຍກວ່າເຂດອື່ນ. ສ່ວນປະຊາຊົນໃນກຸ່ມຊົນເຜົ່າ ທີ່ປະກອບອາຊີບນອກການຜະລິດກະສິກຳ ກໍ່ຍັງມີຈຳນວນໜ້ອຍ. ໂຄງປະກອບກຳລັງແຮງງານແລະທ່າອ່ຽງດັ່ງກ່າວນີ້ສະແດງໃຫ້ເຫັນວ່າ ກຳລັງແຮງງານປະກອບສ່ວນໃນກິດຈະກຳເສດຖະກິດທັນສະໄໝຍັງຢູ່ໃນລະດັບຕ່ຳ.

ວຽກເຮັດງານທຳທີ່ມີປະສິດທິຜົນ ແລະ ມີຜົນຕອບແທນທີ່ດີເປັນຂໍກຸນແຈສຳຄັນຂອງການຫຼຸດຜ່ອນຄວາມທຸກຍາກ ແລະ ການປັບປຸງການພັດທະນາມະນຸດ. ບັນຫາລະດັບການສ້າງງານ ຕ່ຳໂດຍສະເພາະກໍ່ແມ່ນຢູ່ ໃນຂະແໜງອຸດສາຫະກຳ ແລະ ການບໍລິການ ແລະ ຜະລິດຕະພາບແຮງງານໃນຂະແໜງກະສິກຳຕ່ຳເປັນສາເຫດຕົ້ນຕໍທີ່ເຮັດໃຫ້ຄຸນນະພາບຂອງວຽກໂດຍລວມຕ່ຳ, ມີລະດັບຊີວິດ ການເປັນຢູ່ປານກາງ ແລະ ລະດັບການພັດທະນາມະນຸດຕ່ຳ.

### ສ່ວນປະກອບຂອງການເຕີບໂຕເສດຖະກິດເປັນອຸປະສັກໃຫ້ແກ່ການສ້າງວຽກເຮັດງານທຳ

ເມື່ອລວມຍອດຜະລິດຕະພັນພາຍໃນເຕີບໂຕ 1% ເຮັດໃຫ້ອັດຕາວຽກເຮັດງານທຳຢູ່ລາວເຮົາ ເພີ່ມຂຶ້ນໃນ ລະດັບ 0.4%, ໃນນັ້ນຂະແໜງກະສິກຳເຕີບໂຕພຽງ 0.37% (ໃນໄລຍະປີຜ່ານມາອັດຕາປະລິມານການຜະລິດໃນຂະແໜງກະສິກຳ ບໍ່ໄດ້ເຕີບໂຕຫຼາຍເທົ່າທີ່ຄວນ), ອຸດສາຫະກຳເຕີບໂຕ 0.57% [ບໍ່ແຮ່ ເຕີບໂຕ 0.29%, ໄຟຟ້າ (ບວກກັບອາຍແກັດສ, ນ້ຳປະປາ ແລະ ການບຳບັດນ້ຳເສຍ) ເຕີບໂຕ0.38%, ແລະການປຸງແຕ່ງ(ບວກການກໍ່ສ້າງ) ເຕີບໂຕ 0.63%], ແລະ ການບໍລິການ ເຕີບໂຕ 0.84% (ການຄ້າ 0.73%, ໂຮງແຮມ ແລະ ຮ້ານອາຫານ 1.32%).

ການເຕີບໂຕຂອງເສດຖະກິດ ຕັ້ງແຕ່ຊຸມປີ 1990 ເປັນຕົ້ນມາເຫັນວ່າມີການເໜັງຕີງໃນວົງແຄບ ລະຫວ່າງ (ກ) ຂະແໜງການເຂັ້ມແຮງງານ (ໃຊ້ທຶນໜ້ອຍ) ແລະ (ຂ) ຂະແໜງການທີ່ບໍ່ເຂັ້ມແຮງງານ (ເຂັ້ມທຶນ). ໃນຍຸກສະໄໝສະຫະສະວັດໃໝ່ນີ້, ກະແສຂອງການລົງທຶນເຂົ້າໃນຂະແໜງການທີ່ບໍ່ເຂັ້ມແຮງງານ ແມ່ນມີຫຼາຍກວ່າ. ຂໍ້ມູນປີ 2003-2007 ຊີ້ໃຫ້ເຫັນວ່າ 61% ຂອງການລົງທຶນໃນໂຄງການໃຫຍ່ ແມ່ນຢູ່ໃນຂະແໜງບໍ່ແຮ່ ແລະ ພະລັງງານໄຟຟ້າ (ລ້ວນແຕ່ແມ່ນຂະແໜງການທີ່ ເຂັ້ມທຶນ). ໃນໄລຍະ 5 ປີຜ່ານມາຂະແໜງບໍ່ແຮ່ ໄດ້ເຕີບໂຕ 100 ເທົ່າ ແລະ ປະຈຸບັນກວມເອົາອັດຕາສ່ວນຂອງ ລວມຍອດຜະລິດຕະພັນພາຍໃນ ເຖິງ 12%, ແຕ່ວ່າການສ້າງວຽກເຮັດງານທຳໂດຍກົງໃນຂະແໜງບໍ່ແຮ່ກໍ່ຍັງມີໜ້ອຍກວ່າ 8,000 ຄົນ ແລະ ຕົວເລກການຈ້າງງານໃນຂະແໜງໄຟຟ້າ (ບວກກັບອາຍແກັສ ແລະ ນ້ຳປະປາ) ກໍ່ຍິ່ງມີໜ້ອຍກວ່ານັ້ນຫຼາຍ. ໃນບັນດາຂະແໜງການທີ່ເຂັ້ມງານນັ້ນ, ຂະແໜງຕັດຫຍິບຖືວ່າເປັນຂະແໜງການທີ່ສ້າງວຽກເຮັດງານທຳຫຼາຍກວ່າໝູ່, ຮອງລົງມາກໍ່ແມ່ນຂະແໜງປຸງແຕ່ງໄມ້, ເຟີນີເຈີແລະປຸງແຕ່ງອາຫານຊຶ່ງກວມເອົາ 15% ຂອງການຈ້າງງານໃນຂະແໜງການທີ່ບໍ່ແມ່ນກະສິກຳ. ໃນໄລຍະຊຸມປີ 1990 ແລະ ໄລຍະຕົ້ນຂອງສະຫັດສະວັດໃໝ່, ຂະແໜງການເຫຼົ່ານີ້ມີການເຕີບໂຕໄປໄວແຕ່ຫຼັງຈາກນັ້ນມາຈັງຫວະຂອງການເຕີບໂຕກໍ່ຄ່ອຍໆຊ້າລົງ. ການລົງທຶນໃໝ່ໃນຂະແໜງຕັດຫຍິບ ແມ່ນຢູ່ໃນລະດັບຕ່ຳຫຼາຍ, ໃນນັ້ນ ອັດຕາສະເລ່ຍໃນປີ 2006 ແລະ 2007 ຕ່ຳກວ່າ 0.5% ຂອງມູນຄ່າການລົງທຶນຂອງບັນດາໂຄງການໃຫຍ່.

ເຫດຜົນທີ່ເຮັດໃຫ້ຈັງຫວະການເຕີບໂຕຂອງຂະແໜງການເຂັ້ມງານຊ້າລົງແມ່ນ:

1. ການສົ່ງອອກເຄື່ອງນຸ່ງຫົ່ມປະເຊີນກັບການແຂ່ງຂັນຢ່າງເສລີ ແລະ ດຽວນີ້ລະບົບໂກຕາການ ສົ່ງອອກເຄື່ອງນຸ່ງຫົ່ມກໍ່ໄດ້ໝົດກຳນົດລົງແລ້ວ. ຜະລິດຕະພາບແຮງງານຕ່ຳ ບວກກັບຄ່າສິ້ນເປືອງສູງ (ໂດຍສະເພາະແມ່ນຄ່າຂົນສົ່ງ ແລະ ການຊັກຊ້າຕ່າງໆ) ເຮັດໃຫ້ຜູ້ຜະລິດພົບກັບຄວາມຫຍຸ້ງຍາກໃນການແຂ່ງຂັນໃນຕະຫຼາດເປີດກວ້າງ.

2. ອຸດສາຫະກຳປຸງແຕ່ງໄມ້ຂອງປະເທດເພື່ອນບ້ານມີຄຸນນະພາບດີ ແລະ ມີລາຄາເໝາະສົມກວ່າອຸດ ສາຫະກຳຂອງປະເທດເຮົາ. ພ້ອມກັນນັ້ນ, ປະລິມານໄມ້ທີ່ມີຄຸນນະພາບເພື່ອນຳມາປ້ອນອຸດສາຫະກຳຂອງລາວເຮົາກໍ່ມີໜ້ອຍລົງ.

3. ຂະແໜງປຸງແຕ່ງອາຫານປະສົບກັບບັນຫາຂາດວັດຖຸດິບ ກໍ່ແມ່ນສາເຫດໜຶ່ງ.

4. ການເຂົ້າໄປແຂ່ງຂັນໃນຕະຫຼາດໃຫຍ່ກວ່າສ້າງຄວາມຫຍຸ້ງຍາກໃຫ້ແກ່ທຸກຂະແໜງການຜະລິດ.

5. ທຸກຂະແໜງການປະສົບກັບບັນຫາການຂາດແຮງງານທີ່ມີ

ຄຸນນະພາບ ແລະ ມີຄວາມຫຍຸ້ງຍາກໃນ ການປະຕິບັດຕາມ ຂັ້ນຕອນ ແລະ ລະບຽບກົດໝາຍໃນການດຳເນີນທຸລະກິດ.

ເຖິງແມ່ນວ່າ ລັດຖະບານລາວເຮົາ ໄດ້ປະກາດໃຫ້ພາກເອກະຊົນເປັນຂະແໜງການຕົ້ນຕໍຊຸກຍູ້ການຂະຫຍາຍໂຕຂອງເສດຖະກິດກໍ່ຕາມ, ແຕ່ວ່າພາກເອກະຊົນ ແລະ ທຸລະກິດຂະໜາດກາງ ແລະ ຂະໜາດນ້ອຍ ກໍ່ຍັງເຕີບໂຕໃນລະດັບຊ້າຢູ່. ໜຶ່ງໃນຕົວຊີ້ບອກກໍ່ແມ່ນອັດຕາສ່ວນການລົງທຶນພາຍໃນ ກວມເອົາພຽງແຕ່ 13% ຂອງການລົງທຶນທັງໝົດໃນປີ 2006. ການຂາດການບໍລິການດ້ານການເງິນ ແລະ ກົນໄກການລະດົມເງິນຝາກ, ບັນຫາການເກັບພາສີ, ກົດລະບຽບທີ່ຫຼາຍເກີນໄປ ແລະ ລະບົບໂຄງລ່າງທີ່ບໍ່ພຽງພໍເປັນບັນຫາກົດໜ່ວງ ເຮັດໃຫ້ພາກເອກະຊົນ ບໍ່ໄດ້ຮັບການພັດທະນາເທົ່າທີ່ຄວນ. ຖ້າຫາກພາກເອກະຊົນມີການເຕີບໂຕດີກວ່ານີ້ກໍ່ຈະສາມາດສ້າງວຽກເຮັດງານທຳໄດ້ຫຼາຍຕື່ມອີກ.

## ປັດໄຈຄົນ - ລະດັບຄວາມສາມາດໃນການມີວຽກເຮັດງານທຳ

ໃນເມື່ອວ່າລະດັບສະເລ່ຍປີການສຶກສາຂອງປະຊາຊົນ ມີພຽງແຕ່ 3-4 ປີ ເທົ່ານັ້ນ ຈຶ່ງເປັນເລື່ອງຍາກທີ່ຈະຄາດຫວັງໃຫ້ບັນລຸໄດ້ຄຸນນະພາບການຜະລິດສູງ ແລະ ມີຜົນຕອບແທນທີ່ດີ. ພ້ອມດຽວກັນນັ້ນ, ຄຸນນະພາບຂອງການສຶກສາທີ່ເປັນປັດໄຈສຳຄັນຂອງການຜະລິດກໍ່ຍັງມີລະດັບຕ່ຳຢູ່.

ການສຶກສາເຕັກນິກ ແລະ ວິຊາຊີບກໍ່ຍັງມີບໍ່ພຽງພໍ. ໃນປີ 2007-2008 ມີນັກຮຽນເຂົ້າຮຽນໃນໂຮງຮຽນວິຊາຊີບພຽງແຕ່ 643 ຄົນ ແລະ ນັກຮຽນໃນໂຮງຮຽນເຕັກນິກ 15,102 ຄົນ, ໃນນັ້ນ ມີເພດຍິງກວມປະມານ 30-35% ແລະ ສ່ວນໃຫຍ່ກໍ່ແມ່ນ ຮຽນວິຊາຕັດຫຍິບ ແລະ ປຸງແຕ່ງອາຫານ. ໂຮງຮຽນເຕັກນິກ ແລະ ວິຊາຊີບສ່ວນໃຫຍ່ຈະໃຫ້ການຝຶກອົບຮົມໃນໄລຍະ 2-3 ປີ ສຳລັບຜູ້ທີ່ຮຽນຈົບຫ້ອງ 11 ຫຼື ຈົບມັດທະຍົມສົມບູນ ແລະ ຜູ້ທີ່ຮຽນຈົບຫຼັກສູດຈາກໂຮງຮຽນເຫຼົ່ານີ້ຈະໄດ້ຮັບໃບປະກາດສະນີຍະບັດລະດັບຊັ້ນກາງ ແລະ ຊັ້ນຕົ້ນ. ດັ່ງນັ້ນ, ນັກຮຽນທີ່ຈົບໄປຈະໄດ້ຮັບໜ້າທີ່ຕຳແໜ່ງງານຕ່ຳກວ່າລະດັບບໍລິຫານ. ເນື່ອງຈາກວ່າໂຮງຮຽນເຫຼົ່ານີ້ຕັ້ງຢູ່ໃນເມືອງໃຫຍ່, ຄ່າຮຽນກໍ່ແພງ ແລະ ເວລາຮຽນກໍ່ຂ້ອນຂ້າງຍາວ ຈຶ່ງເຮັດໃຫ້ນັກຮຽນເລືອກຮຽນໃນລະດັບມະຫາວິທະຍາໄລຫຼາຍກວ່າ ທັງໆທີ່ຂະແໜງການທີ່ໄດ້ຮຽນໃນມະຫາວິທະຍາໄລນັ້ນບໍ່ແມ່ນຂະແໜງວິຊາຊີບ. ບັນຫາຄຸນນະພາບການສິດສອນຕ່ຳເຮັດໃຫ້ນັກຮຽນ ບໍ່ມີຄວາມກະຕືລືລົ້ນ ຢາກເຂົ້າຮຽນ. ໃນປີ 2007-2008 ອັດຕາການປະລະການຮຽນໃນໂຮງຮຽນວິຊາຊີບ ມີສູງເຖິງ 70% ແຕ່ສ່ວນອັດຕາການປະລະການຮຽນໃນໂຮງຮຽນເຕັກນິກແມ່ນຫຼຸດລົງພຽງເລັກໜ້ອຍ.

## ບັນຫາການດຳລົງຊີວິດໃນຂະແໜງກະສິກຳ

ຊາວຜູ້ອອກແຮງງານເກືອບທັງໝົດໃນຂະແໜງກະສິກຳສາມາດເອີ້ນໄດ້ວ່າ “ຊາວນາ”. “ລະບົບການຜະລິດແບບຊາວນາ” ແມ່ນແບບແຜນການດຳລົງຊີວິດອັນໜຶ່ງທີ່ມີຄວາມແຕກຕ່າງໄປຈາກກິດຈະກຳ “ການຜະລິດຕາມກົນໄກຕະຫຼາດ” ຊຶ່ງລະບົບການຜະລິດແບບນີ້ ບໍ່ໄດ້ເນັ້ນໜັກການຜະລິດເພື່ອໃຫ້ໄດ້ໝາກຜົນສູງສຸດ ຫຼື ຜະລິດ ເພື່ອການແລກປ່ຽນແຕ່ເປັນການຜະລິດພໍແຕ່ກຸ້ມຕົນເອງຫຼາຍກວ່າ. ໃນຄວາມຈິງລະດັບລາຍໄດ້ຕໍ່ ຫົວຄົນຈາກການຜະລິດເສດຖະກິດແບບນີ້ ໃນລາວ ທີ່ຕ່ຳກວ່າເຄິ່ງໜຶ່ງຂອງລາຍໄດ້ສະເລ່ຍແຫ່ງຊາດຕໍ່ຫົວຄົນນັ້ນສະແດງໃຫ້ເຫັນວ່າຜະລິດຕະພາບຂອງຂະແໜງການນີ້ຍັງຕ່ຳ. ການຫັນປ່ຽນຮູບແບບການຜະລິດພໍແຕ່ກຸ້ມຕົນເອງໄປສູ່ລະບົບກົນໄກຕະຫຼາດຢ່າງມີປະສິດທິຜົນນັ້ນເປັນສິ່ງທີ່ນັກການເມືອງ ແລະ ຜູ້ວາງນະໂຍບາຍທັງຫຼາຍ ບໍ່ສະເພາະແຕ່ຢູ່ໃນລາວເຮົາເທົ່ານັ້ນ ແຕ່ລວມທັງຫຼາຍປະເທດໃນໂລກຍັງມີຄວາມຫຍຸ້ງຍາກ ແລະ ສັບສົນເຊັ່ນດຽວກັນ.

### ການຜະລິດກະສິກຳແບບຊາວນາອາດບໍ່ພຽງພໍແກ່ການລ້ຽງຊີບຕໍ່ໄປອີກແລ້ວ

ສປປ ລາວ ມີເນື້ອທີ່ດິນກວ້າງຂວາງ ແລະ ມີປະຊາກອນໜ້ອຍ, ແຕ່ໃນນັ້ນເນື້ອທີ່ດິນຫຼາຍກວ່າ 70% ເປັນເນື້ອທີ່ດິນບໍ່ຮາບພຽງ, ປະມານ 35-40% ຍັງປົກຄຸມໄປດ້ວຍປ່າໄມ້ ແລະ ເນື້ອທີ່ດິນຈຳນວນໜຶ່ງກໍ່ເຕັມ ໄປດ້ວຍລະເບີດບໍ່ທັນແຕກ (ຕົວເລກເຫຼົ່ານີ້ຍັງຊ້ຳຊ້ອນກັນ). ເນື້ອທີ່ດິນທີ່ນຳໃຊ້ເຂົ້າໃນການຜະລິດກະສິກຳແມ່ນມີຕ່ຳກວ່າ 5% ຂອງເນື້ອທີ່ດິນທັງໝົດໃນປະເທດ. ສະນັ້ນ, ເນື້ອທີ່ດິນຜະລິດກະສິກຳທີ່ຊາວນາຜູ້ໜຶ່ງມີ ຈຶ່ງບໍ່ເກີນເຄິ່ງເຮັກຕາ.

ຊາວນາສ່ວນໃຫຍ່ທຳການການຜະລິດໃນເນື້ອທີ່ດິນຕອນນ້ອຍໆ. ຊາວນາຜູ້ຊາຍຖືວ່າຕົນເອງປະກອບອາຊີບອິດສະຫຼະ, ສ່ວນແມ່ຍິງກໍ່ຖືວ່າຕົນເອງເຮັດວຽກຊ່ອຍຄອບຄົວແບບບໍ່ມີຄ່າຈ້າງໂດຍຮັບຜິດຊອບວຽກງານໃນ ລະດັບຕ່ຳຖັດລົງມາ. ການປ່ຽນວຽກຂອງແຮງງານຈຳນວນໜຶ່ງ ຈາກວຽກກະສິກຳ ໄປສູ່ຂະແໜງການອື່ນໃນ ຊ່ວງໄລຍະປີ 1995-2005 ບໍ່ໄດ້ເຮັດໃຫ້ມີຄວາມແຕກຕ່າງຫຍັງຫຼວງຫຼາຍ ຍ້ອນວ່າ ລັກສະນະການ ເພີ່ມຂຶ້ນຂອງກຳລັງແຮງງານປະມານ 2.5% ຕໍ່ປີນັ້ນ ເຮັດໃຫ້ຈຳນວນພົນລະເມືອງ ທີ່ມີການເອື່ອຍອີງໃສ່ທີ່ດິນເພີ່ມຂຶ້ນ. ໃນທົດສະວັດຜ່ານມາ ຊາວນາໄດ້ຈັບຈອງເອົາເນື້ອທີ່ດິນປ່າ ແລະ ດິນທົ່ງຫຍ້າ ເພື່ອນຳໃຊ້ເຂົ້າໃນການປູກຝັງຊຶ່ງເຮັດໃຫ້ເນື້ອທີ່ດິນປູກຝັງທັງໝົດ ເພີ່ມຂຶ້ນໃນອັດຕາປະມານ 4.7% ຕໍ່ປີ ຊຶ່ງສູງກວ່າອັດຕາ ການຂະຫຍາຍໂຕຂອງການຜະລິດໃນຂະແໜງການນີ້. ດັ່ງນັ້ນ, ຜົນຜະລິດໃນຂະແໜງການກະສິກຳສ່ວນໃຫຍ່ ແມ່ນມາຈາກ ການຂະຫຍາຍເນື້ອທີ່ການຜະລິດເທົ່ານັ້ນ ແຕ່ບໍ່ແມ່ນໄດ້ມາຈາກການເພີ່ມຂຶ້ນຂອງຜະລິດຕະພາບ. ລັກສະນະທ່າອ່ຽງແນວນີ້ແມ່ນບໍ່ຍືນຍົງ.

ຈາກຜົນການສຶກສາກຸ່ມຕົວແທນຄົວເຮືອນ ຈຳນວນ 2,034 ຫຼັງໃນ 20 ບ້ານຈະເຫັນໄດ້ວ່າ ຈຳນວນແຮງງານ 5-8% (ຜູ້ຊາຍຫຼາຍກວ່າແມ່ຍິງ) ຍຶດຖື “ອາຊີບເປັນກຳມະກອນຮັບຈ້າງຊົ່ວຄາວ” ແບບເຕັມເວລາ ຊຶ່ງແມ່ນ ປະເພດແຮງງານຫາລ້ຽງຊີບດ້ວຍການຂາຍແຮງງານ. ສ່ວນໃຫຍ່ແລ້ວ ເຂົາເຈົ້າບໍ່ມີທີ່ດິນເປັນຂອງຕົນເອງ ຫຼື ບໍ່ມີທີ່ດິນຄອບຄອງ ແລະ ມີຄວາມຊຳນານງານໜ້ອຍ. ເນື່ອງຈາກວ່າຈຳນວນແຮງງານປະເພດນີ້ ມີເພີ່ມຫຼາຍຂຶ້ນ (ຍ້ອນການເຕີບໂຕຂອງປະຊາກອນ) ຈຶ່ງເຮັດໃຫ້ມີການແຂ່ງຂັນກັນໃນວຽກງານຄືກັນນີ້ຫຼາຍຂຶ້ນ ແລະ ເພີ່ມຄວາມກົດດັນ ເຮັດໃຫ້ຄ່າຈ້າງແຮງງານຕົກຕ່ຳລົງ. ພ້ອມດຽວກັນນັ້ນ, ໃນສະພາບເສດຖະກິດທີ່ເນັ້ນໃສ່ຄວາມຮູ້ເປັນພື້ນຖານ, ຄວາມຕ້ອງການແຮງງານສີມືຕ່ຳກໍ່ນັບມື້ນັບຫຼຸດໜ້ອຍລົງ. ປະສົບການຈາກຫຼາຍປະເທດໃນພາກພື້ນອາຊີຊີ້ໃຫ້ເຫັນວ່າ ໃນຂັ້ນສຸດທ້າຍ ປະຊາຊົນກຸ່ມນີ້ ຈະກາຍເປັນກຸ່ມຄົນທຸກຍາກ ແລະ ຂາດຄວາມໝັ້ນຄົງທີ່ສຸດຢູ່ໃນສັງຄົມ.

### ບັນຫາການຂາດວຽກເຮັດງານທຳໃນເຂດຊົນນະບົດ...

ໃນເຂດຊົນນະບົດເວລານີ້ເກີດມີບັນຫາໄພຫວ່າງງານ ແລະ ການເຮັດວຽກບໍ່ເຕັມເວລາຕາມມາດຕະຖານ. ຈາກຜົນການສຳຫຼວດຄົວ

ເຮືອນໃນ 20 ບ້ານ ທີ່ໄດ້ກ່າວມາຂ້າງເທິງນັ້ນຈະເຫັນໄດ້ວ່າອັດຕາການຫວ່າງງານຄິດໄລ່ເປັນອັດຕາສ່ວນຂອງແຮງງານຕໍ່ມື້ທີ່ບໍ່ໄດ້ເຮັດວຽກຕໍ່ຈຳນວນແຮງງານຕໍ່ມື້ທັງໝົດ ແມ່ນມີຢູ່ໃນລະດັບແຕ່ 12% ຫາ 15%. ຜູ້ອອກແຮງງານທີ່ເປັນແມ່ຍິງ ປະສົບກັບບັນຫາໄພຫວ່າງງານ ຫຼາຍກວ່າແຮງງານ ຊາຍ ໂດຍສະເພາະ ໃນລະດູການທີ່ບໍ່ມີການຜະລິດ. ນອກຈາກນັ້ນ, ການຫວ່າງງານໃນກຸ່ມຄົນທຸກຍາກ, ຊາວກະສິກອນທີ່ຂາດທີ່ດິນ, ຊາວກະສິກອນທຳການຜະລິດຂະໜາດນ້ອຍ, ກຸ່ມຊົນເຜົ່າ ແລະ ກຸ່ມຄົນ ທີ່ຍົກຍ້າຍຖິ່ນຖານຢູ່ພາຍໃນມີສູງກວ່າກຸ່ມອື່ນໆ. ການທີ່ກຸ່ມຄົນທີ່ອ່ອນແອກວ່າໃນສັງຄົມ ພົບກັບບັນຫາການ ຫວ່າງງານຫຼາຍກວ່າກຸ່ມອື່ນໆນັ້ນແມ່ນບັນຫາທີ່ໜ້າເປັນຫວ່ງ.

ຜູ້ອອກແຮງງານຫຼາຍຄົນຢຸດເຊົາເຮັດວຽກໃນລະດູແລ້ງ ແລະ ກັບຄືນມາເຮັດວຽກໃນລະດູຝົນ. ໃນເມື່ອກ່ອນ, ໂດຍສະເພາະກໍ່ແມ່ນຢູ່ໃນຂະແໜງການຜະລິດກະສິກຳເພື່ອກຸ້ມຕົນເອງ, ການຢຸດເຊົາວຽກຕາມລະດູການ ໃນໂຮງຈັກໂຮງງານ ຂອງຜູ້ອອກແຮງງານເປັນການຢຸດເຊົາເອົາເອງ ເພື່ອກັບຄືນໄປເຮັດວຽກງານຜະລິດກະສິກຳຂອງຕົນ. ເຖິງຢ່າງໃດກໍ່ຕາມ, ໃນໄລຍະຜ່ານມາຈະເຫັນວ່າມີການເປີດກວ້າງສູ່ພາຍນອກຫຼາຍຂຶ້ນ, ຜົນຜະລິດຈາກປ່າໄມ້ທຳມະຊາດຫຼຸດໜ້ອຍລົງ, ຈຳນວນປະຊາກອນກໍ່ເພີ່ມຫຼາຍຂຶ້ນ ແລະ ຄວາມກົດດັນຈາກ ຄວາມຕ້ອງການເງິນສົດ ເຮັດໃຫ້ຜູ້ອອກແຮງງານ ບໍ່ສາມາດທີ່ຈະຢຸດເຊົາວຽກຕາມລຳພັງໃຈຄື ແຕ່ກ່ອນໄດ້ຕໍ່ໄປອີກແລ້ວ. ດຽວນີ້, ເຂົາເຈົ້າໄດ້ປ່ຽນຄວາມໝາຍຂອງການຢຸດວຽກຕາມລະດູການຈະ ແມ່ນຢຸດເຊົາໃນໄລຍະເວລາໃດໜຶ່ງກໍ່ດີ ມາເປັນຄຳວ່າ ການຢູ່ລ້າໆບໍ່ມີວຽກເຮັດງານທຳໂດຍບໍ່ໄດ້ຕັ້ງໃຈ ຊຶ່ງໃນຄວາມຈິງແລ້ວ ເຂົາເຈົ້າຍັງຕ້ອງການເຮັດວຽກຢູ່ ແຕ່ຫາກວ່າບໍ່ມີວຽກເຮັດ. ອັດຕາການເຮັດວຽກບໍ່ເຕັມເວລາ ຕາມມາດຕະຖານ ແມ່ນຂຶ້ນກັບວິທີການຄິດໄລ່. ອັດຕາສ່ວນແຮງງານທີ່ຕ້ອງການຢາກເຮັດວຽກເພີ່ມ (ຫຼື ເຮັດວຽກເສີມ) ໃນ 20 ບ້ານຕົວແທນແມ່ນມີສູງເຖິງ 56% ຂອງຈຳນວນແຮງງານທັງໝົດ.

### ຄວາມບໍ່ເທົ່າທຽມກັນໃນການນຳໃຊ້ທີ່ດິນກະສິກຳ ແລະ ການເພີ່ມຂຶ້ນຂອງບັນຫາການຂາດແຄນທີ່ດິນ

ຄວາມບໍ່ເທົ່າທຽມກັນໃນການນຳໃຊ້ທີ່ດິນກະສິກຳ ແລະ ການຂາດແຄນທີ່ດິນທັງສອງບັນຫານີ້ລ້ວນແຕ່ເປັນອຸປະສັກແກ່ການດຳລົງຊີວິດຂອງປະຊາຊົນ. ຜົນການສຶກສາກຸ່ມຕົວແທນທີ່ໄດ້ກ່າວມານັ້ນຊີ້ໃຫ້ເຫັນວ່າ ອັດຕາສ່ວນຄົວເຮືອນຊົນນະບົດທີ່ຂາດທີ່ດິນ ມີສູງເຖິງ 15% ໂດຍມີເຄິ່ງໜຶ່ງຂອງຄົວເຮືອນດັ່ງກ່າວ ທຳການປູກຝັງຮ່ວມກັບຄົວເຮືອນອື່ນ ຫຼື ເຊົ່າທີ່ດິນເພື່ອທຳການປູກຝັງ. ປະມານ 2/3 ຂອງຊາວນາທີ່ຂາດທີ່ດິນ ແມ່ນດຳລົງຊີວິດຢູ່ໃນລະດັບຕໍ່າກວ່າມາດຕະຖານຄວາມທຸກຍາກ.

ເຫດຜົນຫຼາຍຢ່າງທີ່ເຮັດໃຫ້ເກີດບັນຫາຂາດແຄນທີ່ດິນ ແລະຄວາມບໍ່ເທົ່າທຽມກັນໃນການນຳໃຊ້ທີ່ດິນ:

1. ອັດຕາການເຕີບໂຕຂອງພົນລະເມືອງສູງກວ່າ 2% ຕໍ່ປີ ໃນລະຫວ່າງຊຸມປີ1980ແລະ1990ເຮັດໃຫ້ກຳລັງແຮງງານເພີ່ມຂຶ້ນຫຼາຍ,

2. ບັນຫາການຈັດຕັ້ງປະຕິບັດຂະບວນການໂອນທີ່ດິນໃຫ້ແກ່ຜູ້ຮັບສຳປະທານດິນ ຫຼື ບໍລິສັດຂຸດຄົ້ນບໍ່ແຮ່ ແລະ ພະລັງງານໄຟຟ້າເຮັດໃຫ້ຊາວກະສິກອນຈຳນວນໜຶ່ງໄດ້ສູນເສຍທີ່ດິນຂອງຕົນໄປ,

3. ດິນອຸດົມສົມບູນ ໂດຍສະເພາະ ເຂດທົ່ງຮາບແມ່ນ້ຳຂອງ ໄດ້ດຶງດູດເອົາປະຊາຊົນຈາກທ້ອງຖິ່ນອື່ນຍົກຍ້າຍເຂົ້າມາຢູ່ເຮັດໃຫ້ເນື້ອທີ່ດິນກະສິກຳໜ້ອຍລົງ ແລະ ບັນຫາການຂາດທີ່ດິນກໍ່ເພີ່ມຂຶ້ນ.

### ຊັບພະຍາກອນມະນຸດ ແລະ ຄວາມທຸກຍາກໃນເຂດຊົນນະບົດ

ລະດັບທຶນມະນຸດສະເລ່ຍວັດແທກຕາມປີການສຶກສາສະເລ່ຍຕໍ່ຫົວຄົນ ຂອງສະມາຊິກໃນຄົວເຮືອນຂອງບ້ານກຸ່ມຕົວແທນໃນເກນອາຍຸ 10 ປີຂຶ້ນໄປແມ່ນ 3.7 ປີ. ເສັ້ນຕໍ່າສຸດຂອງລະດັບທຶນມະນຸດສຳລັບເກນວັດແທກຄວາມທຸກຍາກກໍ່ຄື ຈຳນວນສະເລ່ຍປີການສຶກສາຕໍ່າສຸດຕໍ່ຫົວຄົນໃນຄົວເຮືອນ (ອີງຕາມເກນວັດແທກ) ແມ່ນ 2.06 ປີ. ຈາກເກນດັ່ງກ່າວຈະເຫັນວ່າ ອັດຕາສ່ວນຄົວເຮືອນປະມານ 36% ຂອງຈຳນວນຄົວເຮືອນກຸ່ມຕົວແທນທັງໝົດທີ່ໄດສຶກສາມີລະດັບຕໍ່າກວ່າເສັ້ນຄວາມທຸກຍາກດ້ານທຶນມະນຸດ. ອັດຕາສ່ວນຄວາມທຸກຍາກ ດ້ານທຶນມະນຸດ ໃນກຸ່ມບ້ານຕົວແທນໃນແຕ່ລະເຂດ ມີຄວາມແຕກໂຕນກັນຄື ສູງສຸດຢູ່ໃນລະດັບ 92% ຢູ່ໃນກຸ່ມບ້ານທີ່ມີການຫັນປ່ຽນອາຊີບຢູ່ທາງພາກເໜືອ ແລະ ຕໍ່າສຸດຢູ່ໃນລະດັບ 10% ໃນບ້ານທີ່ເຊື່ອມຕໍ່ກັບຕະຫຼາດ. ອັດຕາດັ່ງກ່າວມີສູງກວ່າ 90% ຢູ່ໃນກຸ່ມຊົນເຜົ່າໝວດພາສາຈີນ-ຕິເບດ ແລະ ຖັດລົງມາກໍ່ແມ່ນກຸ່ມຊົນເຜົ່າໝວດພາສາມອນ-ຂະແມ, ມົ້ງ-ອິວມຽນ ແລະ ລາວ-ໄຕ ຕາມລຳດັບ. ອັດຕາສ່ວນ ອັນນີ້ສະແດງໃຫ້ເຫັນສາຍພົວພັນສຳຄັນທີ່ບໍ່ສາມາດປະຕິເສດໄດ້ ລະຫວ່າງລະດັບທຶນມະນຸດ, ການມີວຽກເຮັດງານທຳ ແລະ ລາຍຮັບ. ເວົ້າໄດ້ອີກແນວໜຶ່ງກໍ່ແມ່ນວ່າ ປະຊາຊົນຜູ້ທີ່ບໍ່ມີລະດັບການສຶກສາສູງຈະທຸກຍາກກວ່າຍ້ອນວ່າ ເຂົາເຈົ້າມີຂີດຄວາມສາມາດບໍ່ພຽງພໍ ທີ່ຈະເຮັດໃຫ້ຕົນເອງ ສາມາດມີວຽກເຮັດງານທຳໃນກິດຈະກຳຕ່າງໆທີ່ຫຼາກຫຼາຍໄດ້.

## 'ແຮງງານທີ່ມີລາຍຮັບຕໍ່າ' ຢູ່ໃນເຂດຕົວເມືອງ ບໍ່ໄດ້ຮັບ 'ວຽກທີ່ດີມີຄຸນຄ່າ' ສະເໝີໄປ

'ແຮງງານມີລາຍຮັບຕໍ່າ' ລວມເອົາແຮງງານທີ່ຢູ່ໃນ ຫຼື ນອກຂະແໜງການທີ່ບໍ່ເປັນທາງການ ເຊັ່ນ ແຮງງານທີ່ ປະກອບອາຊີບອິດສະຫຼະ, ແຮງງານຮັບຈ້າງທົ່ວໄປ ຫຼື ຜູ້ຊ່ວຍ ຊຶ່ງສ່ວນໃຫຍ່ແລ້ວແຮງງານເຫຼົ່ານີ້ ເປັນແຮງງານທີ່ມີລະດັບທັກສະສີມືຕໍ່າ, ຄ່າແຮງງານຕໍ່າ ແລະ ໂດຍທົ່ວໄປແລ້ວ ບໍ່ໄດ້ຮັບການປົກປ້ອງຈາກກົດໝາຍ (ຫຼື ບໍ່ມີລະບຽບການຄຸ້ມຄອງສະພາບຂອງວຽກງານ) ແລະ ສະພາບແວດລ້ອມໃນການເຮັດວຽກກໍ່ບໍ່ມີຄວາມແນ່ນອນ. ໃນທົ່ວປະເທດ, ແຮງງານໃນຂະແໜງການຈ້າງງານຂັ້ນຕໍ່າໃນຕົວເມືອງ ກວມເອົາປະມານ 21.5% ຂອງແຮງງານເຮັດວຽກນອກຂະແໜງການກະສິກຳ.

### ເງື່ອນໄຂການເຮັດວຽກ ແລະ ລາຍຮັບບໍ່ແນ່ນອນ

ຕາມປົກກະຕິແລ້ວ, ແຮງງານສ່ວນໃຫຍ່ເຮັດວຽກ 55 - 70 ຊົ່ວໂມງຕໍ່ອາທິດໂດຍບໍ່ໄດ້ພັກເຊົາ ເພື່ອສູ້ຊົນໃຫ້ໄດ້ລາຍຮັບໃນລະດັບປານກາງ ແລະ ແຮງງານເຫຼົ່ານີ້ ກໍ່ຍັງໄດ້ປະຢັດເງິນຈຳນວນໜຶ່ງໄວ້ເພື່ອສົ່ງໄປຊ່ວຍເຫຼືອຄອບຄົວຂອງຕົນເອງຢູ່ທາງບ້ານ. ແຮງງານຫຼາຍຄົນພົບກັບບັນຫາການຂູດຮີດ, ເອົາລັດເອົາປຽບ ແລະ ຄວາມສ່ຽງໃນການຫຼຸບທຶນຈາກທຸລະກິດນ້ອຍຂອງເຂົາເຈົ້າ. ບາງຄົນ ກໍ່ອາດມີລະບຽບການຄຸ້ມຄອງເປັນລາຍລັກອັກສອນໄວ້, ແຕ່

ໃນຕົວຈິງນັ້ນ ອາດບໍ່ໄດ້ຮັບສິດຜົນປະໂຫຍດຫຍັງເລີຍ ຍ້ອນການຈັດຕັ້ງປະຕິບັດໃຫ້ຖືກຕາມລະບຽບກົດໝາຍຍັງຢູ່ໃນລະດັບຕ່ຳ. ຕົວຢ່າງ ແຮງງານໃນອຸດສາຫະກຳຕັດຫຍິບ ຄວນຈະໄດ້ຮັບການຄຸ້ມຄອງຈາກກົດໝາຍ, ແຕ່ຜົນການສຳຫຼວດກຸ່ມຕົວແທນແຮງງານ 800 ຄົນ ຊີ້ໃຫ້ເຫັນວ່າ ແຮງງານຫຼາຍກວ່າເຄິ່ງໜຶ່ງ ບໍ່ມີສັນຍາແຮງງານ ເປັນລາຍລັກອັກສອນກັບນາຍຈ້າງ. ອີງຕາມບົດລາຍງານການພັດທະນາມະນຸດແຫ່ງຊາດເຫຼັ້ມທີ 3, ອຸດສາຫະກຳຕັດຫຍິບ ເປັນອຸດສາຫະກຳ ທີ່ມີການສົ່ງເສີມ ການພັດທະນາມະນຸດໃນລະດັບສູງ ໂດຍອີງໃສ່ ການສ້າງວຽກເຮັດງານທຳຂອງຂະແໜງການດັ່ງກ່າວ. ເຖິງຢ່າງໃດກໍ່ຕາມ, ຂະແໜງການນີ້ຈະເປັນຂະແໜງການສົ່ງເສີມການພັດທະນາມະນຸດໄດ້ດີແທ້ ຖ້າຫາກວ່າຂະແໜງການນີ້ປະຕິບັດຕາມເງື່ອນໄຂມາດຕະຖານຂອງກົດໝາຍແຮງງານ.

ແຮງງານທຸກຄົນມັກຈະປະສົບກັບໄລຍະການຫວ່າງງານເລື້ອຍໆ. ໃນໄລຍະການຫວ່າງງານນີ້ ການດຳລົງຊີວິດຂອງເຂົາເຈົ້າ ຈະໄດ້ຮັບຄວາມຝືດເຄືອງຫຼາຍ ຍ້ອນວ່າເຂົາເຈົ້າດຳລົງຊີວິດຢູ່ໄດ້ ໂດຍອາໄສແຫຼ່ງລາຍຮັບ ພຽງແຫຼ່ງດຽວເປັນຕົ້ນຕໍ. ຈາກຜົນການສຶກສາ ກຸ່ມຕົວແທນ ຈະເຫັນໄດ້ວ່າ 64% ຂອງແຮງງານປະສົບກັບບັນຫາຄວາມບໍ່ແນ່ນອນຂອງວຽກເຮັດງານທຳ (ແຮງງານຜູ້ຊາຍຫຼາຍກວ່າແມ່ຍິງ), ແຮງງານປະມານ 12-13% ພົບກັບບັນຫາການຢຸດຈ້າງງານ ຫຼື ການຫວ່າງງານໃນປີຜ່ານມາ ແລະ 26% ຄິດວ່າເຂົາເຈົ້າເຮັດວຽກບໍ່ເຕັມມາດຕະຖານເວລາ (ແຮງງານແມ່ຍິງຫຼາຍກວ່າຜູ້ຊາຍ). ການສຳຫຼວດຊີ້ໃຫ້ເຫັນວ່າ ແຮງງານຮັບຈ້າງທົ່ວໄປໄດ້ຮັບຄ່າຈ້າງບໍ່ເກີນ 6 - 7 ແສນກີບຕໍ່ເດືອນໃນໄລຍະທີ່ເຂົາເຈົ້າມີວຽກເຮັດ. ສຳລັບແຮງງານທີ່ໄດ້ຄ່າຈ້າງງານໃນລະດັບຕ່ຳສຸດແມ່ນເທົ່າກັບປະມານ 10,000 ຫາ 15,000 ກີບຕໍ່ມື້.

### ການເຂົ້າສູ່ຕະຫຼາດແຮງງານ ແລະ ການປ່ຽນວຽກ

ການເຂົ້າສູ່ຕະຫຼາດແຮງງານ, ການປ່ຽນວຽກ ຫຼື ການສັບປ່ຽນວຽກອື່ນໆຍັງບໍ່ມີລະບົບ ໂດຍຜ່ານຍາດພີ່ນ້ອງ, ເພື່ອນມິດ ແລະ ສາຍພົວພັນຕ່າງໆ. ຜູ້ໄດ້ເຂົ້າເຮັດວຽກໃໝ່ໃນຕະຫຼາດແຮງງານແມ່ນໄດ້ຮັບການຊ່ວຍເຫຼືອ ຈາກພີ່ນ້ອງ ແລະ ຄົນຮູ້ຈັກກັນ ແລະ ຕ້ອງໄດ້ຕອບແທນດ້ວຍເງິນສົດ ຫຼື ວັດຖຸສິ່ງຂອງ.

ແຮງງານຈຳນວນໜ້ອຍໜຶ່ງໃນກຸ່ມຕົວແທນ ໄດ້ຜ່ານການຝຶກອົບຮົມວິຊາຊີບມາ. ຍິ່ງໄປກວ່ານັ້ນ, ໃນກະໂຕຂະແໜງການເອງ ກໍ່ຍັງມີຂໍ້ຈຳກັດ (ການສ້າງມູນຄ່າເພີ່ມບໍ່ຫຼາຍ) ແລະ ມີໂອກາດໜ້ອຍໃນການສ້າງຄວາມກ້າວໜ້າ. ຍົກຕົວຢ່າງ, ອາຊີບການຂາຍປາຕາມແຄມທາງ ມີໂອກາດຄວາມກ້າວໜ້າໜ້ອຍຫຼາຍນອກ ຈາກວ່າຜູ້ກ່ຽວຈະປ່ຽນໄປເຮັດອາຊີບໃໝ່ ຊຶ່ງກໍ່ເປັນເລື່ອງທີ່ບໍ່ຄ່ອຍໄດ້ປະຕິບັດກັນ.

## ແຮງງານລາວທີ່ເຄື່ອນຍ້າຍ ແມ່ນຊັບສົມບັດຂອງຊາດ

### ແຮງງານເຫຼົ່ານີ້ໄປເຮັດວຽກຢູ່ໃສ ແລະ ມີຈຳນວນຫຼາຍປານໃດ?

ແຮງງານລາວທີ່ໄປເຮັດວຽກຢູ່ຕ່າງປະເທດ ກວມເອົາປະມານ 8% ຂອງແຮງງານທັງໝົດ ຊຶ່ງສ່ວນໃຫຍ່ແລ້ວແມ່ນໄປເຮັດວຽກຢູ່ປະເທດໄທ. ການປະຢັດ ແລະ ການສົ່ງເງິນກັບຄືນບ້ານຂອງແຮງງານເຫຼົ່ານີ້ ຄິດເປັນມູນຄ່າປະມານ 7% ຂອງລວມຍອດຜະລິດຕະພັນພາຍໃນຂອງລາວ. ຖ້າຫາກແຮງງານເຫຼົ່ານີ້ບໍ່ໄດ້ອອກໄປເຮັດວຽກຢູ່ຕ່າງປະເທດ ສະພາບຂອງຕະຫຼາດແຮງງານໃນລາວກໍ່ຍິ່ງຈະມີຄວາມກົດດັນຫຼາຍກວ່າທີ່ເປັນຢູ່ໃນປະຈຸບັນນີ້.

ແຮງງານທີ່ໄປເຮັດວຽກຢູ່ຕ່າງປະເທດຈະໄດ້ຮັບການປົກປ້ອງຈາກກົດໝາຍຕ່ຳທີ່ສຸດ ເນື່ອງຈາກວ່າ ແຮງງານສ່ວນໃຫຍ່ໄປເຮັດວຽກແບບບໍ່ເປັນທາງການ. ກົດລະບຽບຕ່າງໆ ໃນ ສປປ ລາວ ຈະມີຂັ້ນຕອນຫຍຸ້ງຍາກສັບສົນ ແລະ ມີຄ່າໃຊ້ຈ່າຍແພງກວ່າເມື່ອທຽບໃສ່ໃນເບື້ອງໄທ, ດັ່ງນັ້ນ ແຮງງານຫຼາຍກວ່າເຄິ່ງໜຶ່ງທີ່ໄປເຮັດວຽກ ຢູ່ປະເທດໄທຈະເລືອກຈົດທະບຽນຢູ່ປະເທດໄທ. ສ່ວນຈຳນວນແຮງງານທີ່ຈົດທະບຽນຢູ່ລາວ ມີປະມານ 5% ເທົ່ານັ້ນ. ເຖິງຢ່າງໃດກໍ່ຕາມ, ການຈົດທະບຽນນັ້ນ ກໍ່ບໍ່ໄດ້ຊ່ວຍປົກປ້ອງແຮງງານໄດ້ຫຼາຍຍ້ອນວ່າການປະຕິບັດລະບຽບກົດໝາຍໃນປະເທດໄທຕໍ່ແຮງງານຕ່າງດ້າວ ຍັງຖືວ່າຢູ່ໃນລະດັບຕ່ຳ. ແຮງງານຕ້ອງເຮັດວຽກຫຼາຍຊົ່ວໂມງບໍ່ໄດ້ກຳນົດຈະແຈ້ງໂດຍບໍ່ມີການພັກຜ່ອນ. ແຮງງານທີ່ເຮັດວຽກໃນໂຮງງານຂະໜາດນ້ອຍ ຕ້ອງເຮັດວຽກຫຼາຍຊົ່ວໂມງຕິດຕໍ່ກັນ ໂດຍບໍ່ໄດ້ພັກຜ່ອນເລີຍ ຫຼື ໄດ້ພັກຜ່ອນກໍ່ບໍ່ພຽງພໍ. ແຮງງານທີ່ເຮັດວຽກໃນສະຖານທີ່ກໍ່ສ້າງກໍ່ບໍ່ມີເງື່ອນໄຂໄດ້ນຳໃຊ້ອຸປະກອນປ້ອງກັນ ຊຶ່ງເຮັດໃຫ້ເກີດອຸບັດຕິເຫດເລື້ອຍໆ. ສຳລັບແຮງງານທີ່ຊ່ວຍເຮັດວຽກເຮືອນ ກໍ່ຕ້ອງເຮັດວຽກທັງເວັນທັງຄືນ ແລະ ວຽກງານຫຼາຍຢ່າງກໍ່ມີລັກສະນະ "ເປື້ອນ ເປິ, ອັນຕະລາຍ ແລະ ຫຍຸ້ງຍາກ". ພ້ອມກັນນັ້ນ, ແຮງງານຫຼາຍຄົນກໍ່ຖືກຂູດຮີດແຮງງານ (ນາຍຈ້າງບໍ່ປະຕິບັດຕາມສັນຍາ ຫຼື ການຕົກລົງ) ແລະ ບາງຄົນກໍ່ພົບກັບບັນຫາການຄ້າມະນຸດ.ທຸກຄົນພົບກັບບັນຫາການຫວ່າງງານເປັນບາງໄລຍະ ແລະ ເວລາຫວ່າງງານນັ້ນ ຈະເປັນໄລຍະເວລາທີ່ຊີວິດການເປັນຢູ່ ມີຄວາມຫຍຸ້ງຍາກຫຼາຍ. ແຮງງານຈຳນວນໜຶ່ງບໍ່ມີທາງອອກ, ຈຳເປັນກໍ່ຂໍຄວາມຊ່ວຍເຫຼືອຈາກ ສະຖານທູດລາວປະຈຳປະເທດໄທເພື່ອໃຫ້ສົ່ງເຂົາເຈົ້າກັບບ້ານ ແລະ ສຳລັບການໄດ້ຮັບສິດກັບຄືນບ້ານເຂົາເຈົ້າຕ້ອງເສຍຄ່າປັບໃໝສູງ.

ສະພາບແຮງງານທີ່ເຄື່ອນຍ້າຍ ຢູ່ໃນເມືອງຕາມທີ່ໄດ້ພົບເຫັນກໍ່ແມ່ນຄ້າຍຄືກັນ ຊຶ່ງຕ້ອງໄດ້ອີງໃສ່ຊ່ອງທາງທີ່ບໍ່ເປັນທາງການ ເຊັ່ນ ຜ່ານສາຍສຳພັນຂອງຍາດຕິພີ່ນ້ອງ, ມິດຕະພາບ ແລະ ສາຍພົວພັນຕ່າງໆໃນການເຂົ້າສູ່ຕະຫຼາດແຮງງານ, ການສົ່ງເງິນກັບບ້ານ ຫຼື ການຍົກລະດັບການເຮັດວຽກ. ນອກນັ້ນ, ແຮງງານປະເພດນີ້ ຍັງຕ້ອງປະເຊີນກັບອັນຕະລາຍຫຼາຍດ້ານເຊັ່ນ ການຖືກຫຼອກລວງ, ປັບໃໝໃສ່ໂທດ ແລະ ຖືກສໍ້ໂກງອື່ນໆ.

ໜ່ວຍງານທີ່ໃຫ້ການຊ່ວຍເຫຼືອແກ່ແຮງງານລາວ ທີ່ກັບຈາກການໄປເຮັດວຽກຢູ່ຕ່າງປະເທດ ຍັງມີບໍ່ຫຼາຍ ແລະ ການຊ່ວຍເ ຫຼື ອກໍ່ຍັງມີຈຳກັດ ຊຶ່ງຕົ້ນຕໍກໍ່ແມ່ນເລັ່ງໃສ່ ໃຫ້ການຊ່ວຍເຫຼືອແກ່ຜູ້ທີ່ປະສົບບັນຫາການຄ້າມະນຸດ. ເນື່ອງຈາກວ່າລາວເຮົາ ມີຄວາມຕ້ອງການແຮງງານທີ່ມີທັກສະສີມື, ດັ່ງນັ້ນ ການບໍ່ນຳໃຊ້ແຮງງານທີ່ໄດ້ສະສົມທັກສະສີມືຈາກການເຮັດວຽກຢູ່ຕ່າງປະເທດຢ່າງເຕັມເມັດເຕັມໜ່ວຍຖືວ່າເປັນການເສຍໂອກາດ.

## ພາກທີ 3: ການຮັກສາຄຳໝັ້ນສັນຍາ – ນະໂຍບາຍເພື່ອການປັບປຸງໃຫ້ດີຂຶ້ນ

ກອງປະຊຸມໃຫຍ່ຂອງພັກປະຊາຊົນປະຕິວັດລາວ ຄັ້ງທີ່ VIII ໄດ້ມີມະຕິໃຫ້ ສປປ ລາວ ພົ້ນຈາກຄວາມດ້ອຍພັດທະນາ ໃນປີ 2020.

ເພື່ອບັນລຸເປົ້າໝາຍດັ່ງກ່າວ ລັດຖະບານ ໄດ້ພະຍາຍາມນຳໃຊ້ກົນໄກເສດຖະກິດເປີດກວ້າງ ໂດຍການເຂົ້າຮ່ວມໃນ ປະຊາຄົມອາຊີຕາເວັນອອກສ່ຽງໃຕ້ (ASEAN) ແລະ ເຊື່ອມໂຍງເຂົ້າກັບສາກົນ. ລັດຖະບານ ໄດ້ເພີ່ມງົບປະມານ ເພື່ອແນໃສ່ຫຼຸດຜ່ອນຄວາມທຸກຍາກໃນ 47 ເມືອງ ທຸກຍາກ. ພ້ອມກັນນັ້ນ, ບາດກ້າວໃນການເພີ່ມການສ້າງວຽກເຮັດງານທຳ ແລະ ຍົກລະດັບຊີວິດການເປັນຢູ່ໃນເຂດຕົວເມືອງ, ການສ້າງຄວາມທັນສະໄໝໃຫ້ແກ່ຂະແໜງກະສິກຳ ແລະ ການປົກປັກຮັກສາຊັບພະຍາກອນທຳມະຊາດ ກໍ່ແມ່ນສ່ວນໜຶ່ງ ຂອງບັນດາມາດຕະການຕ່າງໆທີ່ຈຳເປັນ ທີ່ລັດຖະບານໄດ້ໃຫ້ຄຳໝັ້ນສັນຍາກັບປະຊາຊົນ.

ຂໍ້ສະເໜີຕໍ່ໄປນີ້ ແມ່ນມາດຕະການທີ່ເນັ້ນໜັກ ໃສ່ການສົ່ງເສີມໃຫ້ມີວຽກເຮັດງານທຳ ແລະ ແກ້ໄຂຊີວິດການເປັນຢູ່ຂອງປະຊາຊົນໃຫ້ດີຂຶ້ນ. ຂໍ້ສະເໜີແນະເຫຼົ່ານີ້ ບໍ່ແມ່ນເລື່ອງໃໝ່ທັງໝົດ ຊຶ່ງໃນນັ້ນມີຫຼາຍອັນກໍ່ເປັນ ການຍົກເອົາອັນເກົ່າຂຶ້ນມາທົບທວນຄືນໃໝ່ອີກ (ລວມທັງຢູ່ໃນເອກະສານຂອງລັດຖະບານ ແລະ ໃນບົດລາຍງານການພັດທະນາມະນຸດແຫ່ງຊາດ ເຫຼັ້ມທີ 3) ແລະ ຂໍ້ສະເໜີແນະບາງອັນ ກໍ່ແມ່ນການເສີມຂະຫຍາຍແລະ ເພີ່ມເຕີມໃຫ້ແກ່ນະໂຍບາຍທີ່ມີຢູ່ໃນປະຈຸບັນ. ບາງຂໍ້ສະເໜີກໍ່ ແມ່ນການຖອດຖອນມາຈາກບົດຮຽນ ແລະ ປະສົບການທີ່ດີຂອງປະເທດອື່ນໆ ຫຼື ບາງຂໍ້ສະເໜີແນະ ກໍ່ແມ່ນມາດຕະການສະເໜີໃໝ່. ດັ່ງທີ່ ທ່ານ ມາບຸບ ອູຮັກ (Mahbub ul Haq), ນັກວິສະວະກອນ ແລະ ຜູ້ສະໜັບສະໜູນການພັດທະນາມະນຸດ ໄດ້ກ່າວເອົາໄວ້ວ່າ "ເວົ້າຄືນເລື່ອງເກົ່າຫຼາຍໆຄັ້ງ, ມື້ໜຶ່ງກໍ່ຈະມີຄົນຟັງເອງ".

## ບັນຫາລວມໃນການເພີ່ມທະວີລະດັບການພັດທະນາມະນຸດ

1. ຄົນຫວ່າງງານ, ແຮງງານທີ່ບໍ່ໄດ້ເຮັດວຽກເຕັມເວລາຕາມມາດຕະຖານ (ເຕັມຊົ່ວໂມງ) ແລະ ຄົນທຸກຍາກແມ່ນກຸ່ມຄົນທີ່ຂາດຄວາມໝັ້ນຄົງທີ່ສຸດ. ໃນນັ້ນ, ບາງສ່ວນກໍ່ອາດໄດ້ຮັບຜົນປະໂຫຍດຈາກການເຂົ້າເຖິງຕະຫຼາດ ຫຼື ໄດ້ຮັບນະໂຍບາຍສະໜັບສະໜູນຈາກ ລັດຖະບານ ແລະ ສິ່ງຈູງໃຈຕ່າງໆ. ແຕ່ຈຳນວນໜຶ່ງກໍ່ອາດຍັງບໍ່ໄດ້ຮັບຜົນປະໂຫຍດເທົ່າທີ່ຄວນ ເນື່ອງຈາກວ່າ ເຂົາເຈົ້າອາໄສຢູ່ໃນເຂດຫ່າງໄກສອກຫຼີກ, ມີຊັບພະຍາກອນບໍ່ຫຼາຍ ຫຼື ຂາດຄວາມເຂັ້ມແຂງ. ດັ່ງນັ້ນ, ເພື່ອເຮັດໃຫ້ການຊ່ວຍເຫຼືອໄປຮອດໄປເຖິງເຂົາເຈົ້າໄດ້ດີ ນອກຈາກການກຳນົດເປົ້າໝາຍຕາມພື້ນທີ່ແລ້ວ ກໍ່ຍັງຈະຕ້ອງໄດ້ກຳນົດນະໂຍບາຍສະເພາະໂດຍເລັ່ງເປົ້າໃສ່ກຸ່ມຄົນເຫຼົ່ານີ້ໃນລະດັບຄົວເຮືອນ ຫຼື ລະດັບບຸກຄົນນຳອີກ.

2. ພ້ອມດຽວກັນນັ້ນ, ບັນດາໂຄງການພັດທະນາຕ່າງໆກໍ່ຕ້ອງກຳນົດ, ພິຈາລະນາ ແລະ ລົງເລິກໃຫ້ລະ ອຽດຈະແຈ້ງຕໍ່ກັບປະເດັນການສ້າງຄວາມສະເໝີພາບ ລະຫວ່າງ ຍິງ-ຊາຍ ແລະ ຊົນເຜົ່າ.

3. ຄວາມສະເໝີພາບ, ຄວາມຍືນຍົງ ແລະ ຄວາມເຂັ້ມແຂງຂອງປວງຊົນ ແມ່ນປັດໄຈສຳຄັນຕົ້ນຕໍຂອງການພັດທະນາມະນຸດ. ເພື່ອຊຸກຍູ້ສົ່ງເສີມໃຫ້ບັນລຸໄດ້ບັນດາເປົ້າໝາຍເຫຼົ່ານີ້ໂດຍສະເພາະໃນເຂດຊົນນະບົດກໍ່ຕ້ອງໄດ້ດຳເນີນການທົບທວນຄືນບັນດາມາດຕະການ ແລະ ໂຄງການຕ່າງໆຂອງລັດຖະບານທີ່ສົ່ງຜົນກະທົບບໍ່ດີຕໍ່ສິ່ງແວດລ້ອມ ຫຼື ຕໍ່ການດຳລົງຊີວິດຂອງປະຊາຊົນ ແລະ ດຳເນີນການປັບປຸງໃຫ້ດີຂຶ້ນຕາມຄວາມເໝາະສົມ.

4. ເພື່ອສາມາດຕິດຕາມກວດກາການພັດທະນາມະນຸດໃຫ້ໄດ້ດີ ມັນມີຄວາມຈຳເປັນທີ່ຈະຕ້ອງເສີມສ້າງຂີດ ຄວາມສາມາດໃນດ້ານການເກັບຂໍ້ມູນໃນລະດັບລະອຽດໂດຍຈັດຕັ້ງໃຫ້ມີໜ່ວຍງານຮັບຜິດຊອບ ແລະ ມີການຝຶກອົບຮົມໃຫ້ແກ່ພະນັກງານຢ່າງຄັກແນ່.

5. ການຄົ້ນຄວ້າວິໄຈສະເພາະດ້ານ ສາມາດຊ່ວຍໃຫ້ເກີດຄວາມຮູ້ຄວາມເຂົ້າໃຈເລິກເຊິ່ງ ເພື່ອສົ່ງເສີມວຽກງານພັດທະນາມະນຸດ ເຊັ່ນ ການຄົ້ນຄວ້າວິໄຈດ້ານສຸຂະພາບ, ການເຄື່ອນຍ້າຍແຮງງານພາຍໃນ, ການສຶກສາຂອງເດັກຍິງ, ວຽກງານນອກກະສິກຳ, ການຝຶກອົບຮົມເພື່ອໃຫ້ສາມາດສ້າງວຽກເຮັດງານທຳ ແລະ ການຊຸກຍູ້ກຸ່ມຊົນເຜົ່າໃຫ້ມາມີສ່ວນຮ່ວມ.

6. ການລົງທຶນເຂົ້າໃນວຽກງານໂຄງລ່າງພື້ນຖານ ແລະ ສັງຄົມໃນເຂດຕ່າງໆ ກໍ່ຄວນໃຫ້ມີຄວາມດຸ່ນດ່ຽງ ແລະ ສະເໝີພາບກັນ.

## ຍົກລະດັບຊີວິດການເປັນຢູ່ຂອງປະຊາຊົນ: ສ້າງວຽກເຮັດງານທຳໃນຂະແໜງນອກກະສິກຳໃຫ້ຫຼາຍ ແລະ ດີຂຶ້ນ.

ການຂະຫຍາຍຂະແໜງອຸດສາຫະກຳ ແລະ ວຽກນອກກະສິກຳ ເພື່ອຮອງຮັບແຮງງານ ແລະ ສະໜອງວຽກງານທີ່ດີໃຫ້ແກ່ແຮງງານແມ່ນປັດໄຈທີ່ມີຄວາມຈຳເປັນ.

ຂະແໜງບໍ່ແຮ່ ແລະ ພະລັງງານໄຟຟ້ານ້ຳຕົກ: ການກຳນົດນະໂຍບາຍຊຸກຍູ້ຂະແໜງບໍ່ແຮ່ ແລະ ພະລັງງານໄຟຟ້ານ້ຳຕົກ ຄວນຈັດໃຫ້ເປັນບູລິມະສິດຂອງລັດຖະບານ ເພື່ອຈັດຫາວຽກເຮັດງານທຳໂດຍທາງກົງ ແລະ ທາງອ້ອມໃຫ້ຫຼາຍຂຶ້ນ. ອາຊີບການງານຫຼາຍຢ່າງ ສາມາດສ້າງຂຶ້ນມາໄດ້ ຖ້າຫາກວ່າ ອຸດສາຫະກຳ (ລວມທັງອຸດສາຫະກຳປຸງແຕ່ງ ແລະ ການນຳໃຊ້ວັດຖຸ) ມີການຂະຫຍາຍໂຕດີ ຊຶ່ງພາກເອກະຊົນພາຍໃນ (ທຸລະກິດຂະໜາດຍ່ອຍ ແລະ ຂະໜາດກາງ ຫຼື ພາກສ່ວນອື່ນ) ທີ່ມີຄວາມເຂັ້ມແຂງ ກໍ່ສາມາດປະກອບສ່ວນເຮັດໃຫ້ວຽກງານນີ້ເກີດຂຶ້ນໄດ້. ພ້ອມກັນນັ້ນ, ກໍ່ຍັງສາມາດກະຈາຍວຽກງານບາງສ່ວນໃຫ້ແກ່ທ້ອງຖິ່ນ ເຊັ່ນ ການສະໜອງ ແລະ ບໍລິການອາຫານ, ການຂົນສົ່ງ ແລະ ການສ້ອມແປງ ຊຶ່ງຈະເປັນການສ້າງວຽກເຮັດງານທຳໃຫ້ແກ່ປະຊາຊົນໃນທ້ອງຖິ່ນ ພ້ອມທັງເປັນການສ້າງໂອກາດໃຫ້ເຂົາເຈົ້າ ໄດ້ເຮັດວຽກໃນສະພາບແວດລ້ອມໃໝ່. ຄວນກະຕຸກຊຸກຍູ້ໃຫ້ ບໍລິສັດບໍ່ແຮ່ປະກອບສ່ວນຖ່າຍທອດເຕັກໂນໂລຊີສຳຄັນ ໃຫ້ແກ່ນັກວິຊາການ ແລະ ຊ່ຽວຊານພາຍໃນ ຢ່າງໜ້ອຍສຸດສຳລັບໂຄງການໃໝ່ ຊຶ່ງຈະຊ່ວຍໃຫ້ທ້ອງຖິ່ນ ໄດ້ເປັນເຈົ້າການໃນການດຳເນີນກິດຈະການຕ່າງໆ ເຊັ່ນ ວຽກງານຂຸດຄົ້ນບໍ່ແຮ່ ແລະ ຊ່ວຍສົ່ງເສີມທຸລະກິດຂະໜາດນ້ອຍ ແລະ ຂະໜາດກາງໄດ້ໃນໄລຍະຍາວ. ເນື່ອງຈາກວ່າ ຂະແໜງບໍ່ແຮ່ ຍັງຈະເປັນຂະແໜງການສຳຄັນໃນຂົງເຂດເສດຖະກິດຂອງປະເທດເຮົາຕໍ່ໄປອີກຢ່າງໜ້ອຍກໍ່ແມ່ນ 2-3 ທົດສະວັດ, ດັ່ງນັ້ນ ສະຖາບັນທີ່ເຮັດໜ້າທີ່ຄົ້ນຄວ້າວິໄຈ ແລະ ໃຫ້ການຝຶກອົບຮົມໃນດ້ານວຽກງານບໍ່ແຮ່ ແລະ ທໍລະນີວິສາດ ຈະສາມາດຊ່ວຍໄດ້ຫຼາຍດ້ານ ຊຶ່ງໃນນັ້ນສຳຄັນທີ່ສຸດກໍ່ແມ່ນ ຊ່ວຍຄຸ້ມຄອງຊັບພະຍາກອນທັງໝົດຂອງປະເທດເຮົາໃຫ້ໄດ້ດີຂຶ້ນ.

ກິດຈະກຳອື່ນໆທີ່ເຂັ້ມແຮງງານ: ຄວນກຳນົດໃຫ້ມີນະໂຍບາຍລະອຽດ ແລະ ກວ້າງຂວາງ ເພື່ອຟື້ນຟູ ແລະ ຂະຫຍາຍອຸດສາຫະກຳ ໂດຍເນັ້ນໜັກການໃຊ້ແຮງງານໃນທຸກວຽກງານບໍ່

ວ່າຈະເປັນອຸດສາຫະກຳຂະໜາດໃຫຍ່, ນ້ອຍ ແລະ ຈຸລະພາກ ກໍ່ດີ (ເຊັ່ນ ວິສາຫະກິດທີ່ມີແຮງງານຜູ້ດຽວ) ເພື່ອເປັນການເຮັດໃຫ້ເກີດ ຜົນປະໂຫຍດໄດ້ດີ. ເພື່ອປັບປຸງ ແລະ ຟື້ນຟູຂະແໜງການນີ້, ວຽກງານໃຈກາງ ທີ່ຕ້ອງເອົາໃຈໃສ່ ແມ່ນ ການກໍ່ສ້າງ ແລະ ປັບປຸງພື້ນຖານໂຄງລ່າງ, ສິນເຊື່ອ, ຕົ້ນທຶນ ແລະ ຂັ້ນຕອນຕ່າງໆ ຂອງການບໍລິຫານງານ (ກົດລະບຽບ, ອາກອນ ແລະ ອື່ນໆ ທີ່ຈະເກີດມີຂຶ້ນໄດ້ໃນຕໍ່ໜ້າ) ພ້ອມດ້ວຍບັນຍາກາດໃນການດຳເນີນທຸລະກິດ. ເວົ້າສະເພາະ ຂະແໜງອຸດສາຫະກຳຕັດຫຍິບ ແມ່ນຕ້ອງການຫຼຸດຜ່ອນຕົ້ນທຶນໃນການຂົນສົ່ງ, ການຄຸ້ມ ຄອງບໍລິຫານ ແລະ ພາສີອາກອນ. ສ່ວນຂະແໜງປຸງແຕ່ງໄມ້ ກໍ່ຕ້ອງການ ການສະໜອງໄມ້ທີ່ມີຄຸນນະພາບໃນປະລິມານສູງ ແລະ ຂະແໜງປຸງແຕ່ງອາຫານຕ້ອງການເຮັດສັນຍາການຜະລິດ ກັບຊາວກະສິກອນ ແລະ ອື່ນໆ. ໃນຂະແໜງບໍລິການກໍ່ເຊັ່ນດຽວກັນ, ການທ່ອງທ່ຽວຈະສາມາດຂະຫຍາຍໂຕໄດ້ໄວກວ່ານີ້ ຖ້າຫາກເອົາໃຈໃສ່ປັບປຸງພື້ນຖານໂຄງລ່າງ ແລະ ການເຊື່ອມໂຍງໃຫ້ດີ. ການຂະຫຍາຍການທ່ອງທ່ຽວໄປສູ່ພື້ນທີ່ຫຼາຍ ແຫ່ງພາຍໃນປະເທດ ໂດຍສະເພາະແມ່ນ ໃນເຂດແຂວງພາກເໜືອສຸດ ທີ່ຍັງບໍ່ເປັນທີ່ຮູ້ຈັກສຳລັບນັກທ່ອງທ່ຽວເຊັ່ນ: ແຂວງຜົ້ງສາລີ ແລະ ຫົວພັນ ຈະຊ່ວຍໃຫ້ເກີດຜົນປະໂຫຍດຫຼາຍ. ຂະແໜງການສຶກສາ ແລະ ສາທາລະນະສຸກ ມີທ່າແຮງໃນການຂະຫຍາຍໂຕ ແລະ ການສ້າງອາຊີບການງານໄດ້ຫຼາຍ ຖ້າກຳນົດ ແລະ ຈັດຕັ້ງປະຕິບັດນະໂຍບາຍຈະແຈ້ງ ກ່ຽວກັບການຮ່ວມມືກັນ ລະຫວ່າງ ພາກລັດ ແລະ ເອກະຊົນ, ລະດັບມາດ ຕະຖານ,ຄ່າສິ້ນເປືອງ, ການອຸດໜູນ, ການໃຫ້ທຶນ ແລະ ການຄໍ້າປະກັນ. ການປັບປຸງຂະແໜງການສຶກສາ ແລະ ສາທາລະນະສຸກ ຍັງຈະຊ່ວຍປູກຈິດສຳນຶກໃຫ້ແກ່ຊຸມຊົນກ່ຽວກັບ ຜົນປະໂຫຍດຈາກການມີການສຶກສາ ແລະ ສຸຂະພາບດີ ໂດຍສະເພາະຢ່າງຍິ່ງກໍ່ແມ່ນການປູກຈິດສຳນຶກໃຫ້ແກ່ກຸ່ມແມ່ຍິງ ແລະ ຊົນເຜົ່າ.

ພາກເອກະຊົນພາຍໃນ: ຄວນພະຍາຍາມເອົາໃຈໃສ່ພິເສດໃນການສ້າງຄວາມເຂັ້ມແຂງໃຫ້ແກ່ພາກເອກະຊົນພາຍໃນທີ່ຫາກໍ່ມີໜໍ່ແໜງຂຶ້ນມາ ໂດຍສະເພາະແມ່ນ ທຸລະກິດຂະໜາດນ້ອຍ ແລະ ຂະໜາດກາງໃນຂະແໜງບໍ່ແຮ່, ພະລັງງານໄຟຟ້ານໍ້າຕົກ ແລະ ອື່ນໆ. ວຽກງານດັ່ງກ່າວນີ້ ຈະຊ່ວຍໃຫ້ປະເທດເຮົາສາມາດຂະຫຍາຍລະດັບຂອບເຂດກິດຈະກຳຂອງຕົນ ໃຫ້ກວ້າງຂວາງອອກນອກເໜືອກວ່າຂະແໜງການຕັດຫຍິບ, ການປຸງແຕ່ງໄມ້ ແລະ ປຸງແຕ່ງອາຫານຊຶ່ງຮຽກຮ້ອງໃຫ້ມີກອງທຶນປະຢັດເຂົ້າມາຮັບໃຊ້ຂະແໜງການປຸງແຕ່ງ ແລະ ບໍລິການ. ຈຸດເລີ່ມຕົ້ນຂອງການລະດົມທຶນນີ້ກໍ່ຄືເລີ່ມຈາກກຸ່ມສິນເຊື່ອແລະຝາກປະຢັດຂັ້ນບ້ານຍ້ອນວ່າບ້ານສ່ວນຫຼາຍມີກຸ່ມດັ່ງກ່າວນີ້ຢູ່ແລ້ວ. ດ້ານສອງ, ພາກສ່ວນທະນາຄານ ແລະ ອົງການຈັດຕັ້ງການເງິນຈຸລະພາກຕ່າງໆກໍ່ມີຄວາມສຳຄັນຊຶ່ງຕ້ອງໄດ້ເສີມຂະຫຍາຍການປະສານງານ ລະຫວ່າງ ໜ່ວຍງານເຫຼົ່ານີ້ ແລະ ລະຫວ່າງໜ່ວຍງານເຫຼົ່ານີ້ ກັບພາກສ່ວນເອກະຊົນພາຍໃນໃຫ້ດີຂຶ້ນຕື່ມ ເພື່ອທີ່ຈະສາມາດຊ່ວຍເຫຼືອ ໃຫ້ຂະແໜງການເອກະຊົນພາຍໃນ ໃຫ້ຫັນປ່ຽນການຝາກປະຢັດໄປສູ່ການລົງທຶນ. ແຕ່ໃນເງື່ອນໄຂຂອງສະພາບການຕົວຈິງຄວນຈະຕ້ອງໃຫ້ມີການຄົ້ນຄວ້າວິໄຈ ແລະ ການສົນທະນາແລກປ່ຽນບົດຮຽນນຳກັນກັບຫຼາຍພາກສ່ວນ. ຂັ້ນຕອນອື່ນໆທີ່ສາມາດເປັນໄປໄດ້ກໍ່ລວມມີການສ້າງຄວາມເຂັ້ມແຂງໃຫ້ແກ່ກຸ່ມຜູ້ຜະລິດສິນຄ້າເພື່ອໃຫ້ເຂົາເຈົ້າມີບົດບາດສຳຄັນໃນຂະບວນການຕັດສິນໃຈໃນບັນຫາເສດຖະກິດຂອງຊາດ, ການຖ່າຍໂອນເຕັກໂນໂລຊີ, ການສ້າງລະບົບການເຊື່ອມໂຍງແນວຫຼັງກັບອຸດສາຫະກຳຂະໜາດໃຫຍ່ (ແລະການບໍລິການ) ໃນປະເທດໄທ ແລະ ຫວຽດນາມ ແລະ ສ້າງເຂດເສດຖະກິດພິເສດທີ່ອີງໃສ່ຄວາມຕ້ອງການຕົວຈິງ. ພ້ອມກັນນັ້ນ, ການສ້າງເວທີປະກອບຄຳຄິດເຫັນຢ່າງກົງໄປກົງມາ ຈາກຫຼາຍພາກສ່ວນ ກ່ຽວກັບວຽກງານການພັດ ທະນາພາກເອກະຊົນ ກໍ່ເປັນວິທີການໜຶ່ງ ທີ່ຈະຊ່ວຍໃຫ້ເກີດມີແນວ ຄວາມຄິດໃໝ່ໆທີ່ຫຼາກຫຼາຍ.

ຂະແໜງການຈຸລະພາກ: ການຂະຫຍາຍໂຕຂອງກິດຈະກຳ ທີ່ບໍ່ແມ່ນກະສິກຳຈຸລະພາກ ໃນເຂດຊົນນະບົດແລະ ຕົວເມືອງ ຈະເປັນວິທີການໜຶ່ງ ທີ່ສາມາດສ້າງວຽກເຮັດງານທຳໃຫ້ຫຼາກຫຼາຍໄດ້ໄວຂຶ້ນ. ແຮງງານຈຳນວນຫຼາຍ ໄດ້ເຮັດວຽກງານເຫຼົ່ານີ້ເຕັມເວລາ ຫຼືເປັນວຽກເສີມຢູ່ແລ້ວ. ກິດຈະກຳເຫຼົ່ານີ້ ມີຄວາມຈຳເປັນຈະຕ້ອງສ້າງໃຫ້ມີຄວາມເຂັ້ມແຂງ ດ້ວຍການປັບປຸງເຕັກໂນໂລຊີ, ການສ້າງຕັ້ງກຸ່ມກິດຈະກຳ ແລະ ການຂະຫຍາຍວຽກງານສິນເຊື່ອ. ການລິເລີ່ມທີ່ສຳຄັນສີ່ປະການດັ່ງຕໍ່ໄປນີ້ ແມ່ນໄດ້ປະຕິບັດທົດລອງ, ທົດສອບ ແລະ ໄດ້ຮັບຜົນມາແລ້ວໃນແຫ່ງອື່ນໆ ຄື:

1. ການຮັບຮູ້ວິສາຫະກິດຈຸລະພາກ ໃນການເປັນຫົວໜ່ວຍທຸລະກິດທີ່ຖືກຕ້ອງຕາມກົດໝາຍ ໂດຍສະເພາະຢູ່ໃນເຂດຕົວເມືອງ.

2. ສ້າງຕັ້ງໜ່ວຍງານບໍລິການດ້ານການພັດທະນາທຸລະກິດເພື່ອໃຫ້ການບໍລິການ ໃຫ້ແກ່ວິສາຫະກິດຈຸລະພາກ

3. ສ້າງຕັ້ງກຸ່ມແຮງງານປະກອບອາຊີບອິດສະຫຼະ ຕາມທ້ອງຖິ່ນຕ່າງໆໃກ້ຄຽງກັນ ເພື່ອນຳໃຊ້ສັບສິນທີ່ແບ່ງປັນບໍ່ໄດ້ຮ່ວມກັນ (ຕົວຢ່າງ ເຄື່ອງແຊ່ເຢັນ, ເຮືອ ແລະ ອື່ນໆ). ໃນນັ້ນ, ການນຳໃຊ້ວິທີການພັດທະນາຊຸມຊົນ ຈະສາມາດໃຫ້ປະໂຫຍດໄດ້ຫຼາຍ, ແລະ

4. ສົ່ງເສີມການເງິນຈຸລະພາກ

ເພື່ອສ້າງນະໂຍບາຍຈັດຕັ້ງປະຕິບັດວຽກງານດ້ານນີ້ ຄວນຈະດຳເນີນການຄົ້ນຄວ້າວິໄຈ ແລະ ປຶກສາຫາລືກັນ ໃຫ້ລະອຽດຕື່ມອີກ.

## ເພີ່ມຄວາມສາມາດໃນການສ້າງວຽກເຮັດງານທຳດ້ວຍການສົ່ງເສີມທຶນມະນຸດ

### ໂດຍຜ່ານເສັ້ນທາງການສຶກສາເຕັກນິກ ແລະ ວິຊາຊີບ

ເນື່ອງຈາກວ່າ ລະບົບການສຶກສາເຕັກນິກ ແລະ ວິຊາຊີບຍັງບໍ່ສອດຄ່ອງກັບພາກອຸດສາຫະກຳ ຈຶ່ງເຮັດໃຫ້ຊາວໜຸ່ມ ນັບມື້ນັບເກີດຄວາມລັ່ງເລໃຈທີ່ຈະເຂົ້າຮຽນໃນລະບົບການສຶກສາດັ່ງກ່າວ. ສະນັ້ນ, ຈຶ່ງຮຽກຮ້ອງໃຫ້ປັບປຸງຂະແໜງການສຶກສາເຕັກນິກ ແລະ ວິຊາຊີບ ໃຫ້ມີຄວາມສອດຄ່ອງ ແລະ ຕອບສະໜອງກັບຄວາມຕ້ອງການໄດ້ຫຼາຍຂຶ້ນ. ເພື່ອຂະຫຍາຍໂອກາດໃຫ້ຊາວໜຸ່ມ ເຂົ້າຮັບການສຶກສາດ້ານເຕັກນິກ ແລະ ວິຊາຊີບ ໃຫ້ຫຼາຍຂຶ້ນ ຄວນເອົາໃຈໃສ່ພິຈາລະນາຂັ້ນຕອນຕ່າງໆດັ່ງຕໍ່ໄປນີ້ຄື:

1. ປັບປຸງຄຸນນະພາບການສິດສອນ ແລະ ຍົກລະດັບຄູອາຈານ.

2. ປັບປຸງຫຼັກສູດການຮຽນໃຫ້ເປັນລະບົບໜ່ວຍກິດ (ຕົວຢ່າງຜູ້ທີ່ໄດ້ຮັບປະກາດສະນີຍະບັດຊັ້ນຕົ້ນລະບົບການຮຽນ 1 ປີສາມາດສືບຕໍ່ຮຽນອີກ 1 ປີ ແລ້ວໄດ້ໃບປະກາດສະນີຍະບັດຊັ້ນກາງ ລະບົບ 2 ປີ - ການປັບປຸງລະບົບຫຼັກສູດນີ້ກຳລັງຢູ່ໃນຂັ້ນພິຈາລະນາຢູ່). ນອກຈາກນີ້, ກໍ່ຄວນສ້າງຫຼັກສູດການຮຽນບາງວິຊາຕື່ມເພື່ອຮັບໃຊ້ສະເພາະເຂດທ້ອງຖິ່ນໃດໜຶ່ງ

ແລະ ເງື່ອນໄຂຊັບພະຍາກອນຂອງທ້ອງຖິ່ນນັ້ນໆ. ການສອນພາສາອັງກິດ ກໍ່ແມ່ນມີຄວາມຈຳເປັນ ຍ້ອນວ່າເອກະສານຄົ້ນຄວ້າຮຽນ ສ່ວນໃຫຍ່ ເປັນພາສາອັງກິດ.

3. ການຝຶກອົບຮົມຄວນເນັ້ນພາກປະຕິບັດໃຫ້ຫຼາຍຊຶ່ງອາດຕ້ອງໃຫ້ມີອຸປະກອນ ແລະ ຫ້ອງທົດລອງ ຫຼາຍຂຶ້ນ ແລະ ປັບປຸງຫ້ອງສະໝຸດໃຫ້ມີເອກະສານຄົ້ນຄວ້າຫຼາຍຂຶ້ນ.

4. ປັບປຸງວິທີ ແລະ ຂັ້ນຕອນການຄັດເລືອກນັກຮຽນ ໂດຍເນັ້ນໃສ່ຄຸນສົມບັດຄວາມສາມາດ ເປັນຕົ້ນຕໍ.

5. ສ້າງສາຍພົວພັນການຮ່ວມມືກັບສະຖາບັນການສຶກສາຕ່າງປະເທດ ໂດຍການແລກປ່ຽນ ແລະ ຖອດຖອນບົດຮຽນນຳກັນ ເພື່ອປັບປຸງຄຸນນະພາບການຮຽນ-ການສອນ ໃນສາຂາວິຊາໃຫ້ດີຂຶ້ນ.

6. ຊຸກຍູ້ສົ່ງເສີມໃຫ້ພາກເອກະຊົນມີສ່ວນຮ່ວມໃນການໃຫ້ຄຳປຶກສາໃນລະດັບທີ່ເໝາະສົມ.

7. ເພີ່ມຈຳນວນບ່ອນຮັບສະໝັກແລະສອບເສັງເຂົ້າຮຽນໃນໂຮງຮຽນເຕັກນິກ ແລະ ວິຊາຊີບໂດຍສະເພາະຊັ້ນຕົ້ນ ເຊັ່ນ: ເພີ່ມອັດຕາສ່ວນຂອງນັກຮຽນທີ່ຮຽນຈົບມໍ 3 ທີ່ສາມາດສະໝັກເຂົ້າຮຽນໃນໂຮງຮຽນເຕັກນິກວິຊາຊີບ ຫຼື ຫຼຸດເກນການຮັບສະໝັກລົງໃຫ້ຜູ້ທີ່ຈົບຊັ້ນປະຖົມສຶກສາ ຫຼື ມໍ 1 ສາມາດສະໝັກເຂົ້າຮຽນໄດ້ໃນບາງຫຼັກສູດ.

8. ຄວນສ້າງເງື່ອນໄຂໃຫ້ນັກຮຽນສາມາດເຂົ້າຮັບການຝຶກອົບຮົມໃຫ້ຫຼາຍຂຶ້ນ ເຊັ່ນ: ອາດຂະຫຍາຍ ຫຼື ຈັດຕັ້ງໃຫ້ມີຫ້ອງຮຽນພາກຄ່ຳ ແລະ ຫ້ອງຮຽນໃນທ້າຍອາທິດ, ແລະ

9. ຍົກລະດັບໂຮງຮຽນບາງແຫ່ງ ໃຫ້ກາຍເປັນວິທະຍາໄລທີ່ສາມາດຮັບຮອງລະດັບຄຸນນະວຸດທິໄດ້ ເພື່ອສ້າງແຫຼ່ງຄວາມຮູ້ດ້ານເຕັກນິກວິຊາການໃນປະເທດ ທີ່ອາດເປັນປະໂຫຍດໃນດ້ານການໃຫ້ຄຳປຶກສາແກ່ລະບົບການສຶກສາເຕັກນິກວິຊາຊີບ.

ນອກຈາກນີ້, ຄວນດຳເນີນການສຳຫຼວດຄວາມຕ້ອງການທາງດ້ານທັກສະສີມືແຮງງານ ເພື່ອຊ່ວຍໃນການກຳນົດຍຸດທະສາດການພັດທະນາສີມືແຮງງານ ໃຫ້ມີຄວາມເໝາະສົມ ແລະ ສອດຄ່ອງ.

ຊັບພະຍາກອນທີ່ມີຢູ່ໃນປະຈຸບັນຍັງບໍ່ພຽງພໍກັບຄວາມຕ້ອງການ.

### ຄວາມຕ້ອງດ້ານການຝຶກອົບຮົມ ດ້ານເຕັກນິກ ແລະ ວິຊາຊີບ

ເພື່ອສົ່ງເສີມກຸ່ມແຮງງານມີຄຸນນະພາບທີ່ສາມາດ ແລະ ມີຄວາມຕ້ອງການຈະປະກອບອາຊີບທີ່ບໍ່ແມ່ນວຽກງານກະສິກຳມັນຮຽກຮ້ອງໃຫ້ມີທັດສະນະຄະຕິ ແລະ ວິທີການຄົ້ນຄິດອັນໃໝ່ໆ. ຊາວໜຸ່ມຈາກກຸ່ມມີລາຍຮັບຕ່ຳໃນເຂດຊົນນະບົດ ແລະ ຕົວເມືອງທີ່ມີລະດັບການສຶກສາສະເລ່ຍ 5-7 ປີ ແມ່ນເປົ້າໝາຍຕົ້ນຕໍຂອງການຝຶກອົບຮົມດ້ານເຕັກນິກ ແລະ ວິຊາຊີບ ໂດຍເນັ້ນໃສ່ວຽກງານຕົວຈິງ. ສ່ວນໃຫຍ່ແລ້ວ, ຊາວໜຸ່ມເຫຼົ່ານີ້ຍາກອອກຈາກການເຮັດວຽກກະສິກຳແບບພໍແຕ່ກຸ້ມກິນ ຫຼື ວຽກບໍ່ຕ້ອງການທັກສະສີມື, ມີຄ່າຕອບແທນໜ້ອຍ ແລະ ບໍ່ມີຄວາມກ້າວໜ້າ ຫຼື ວຽກນອກກະສິກຳທີ່ບໍ່ມີຄວາມແນ່ນອນ. ເພື່ອສ້າງເງື່ອນໄຂໃຫ້ເປົ້າໝາຍດັ່ງກ່າວໄດ້ຮັບການຝຶກອົບຮົມດ້ານສີມືແຮງງານ ຄວນຈັດຕັ້ງໂຮງຮຽນ ແລະ ສູນຝຶກອົບຮົມຂະໜາດນ້ອຍຂຶ້ນຢູ່ໃນແຕ່ລະພາກ ແລະ ດີແທ້ ກໍ່ຄວນຕັ້ງຢູ່ໃກ້ກັບເຂດທີ່ມີນັກຮຽນອາໄສຢູ່ຫຼາຍ ແລະ ການສະໝັກເຂົ້າຮັບການອົບຮົມ ກໍ່ຄວນຈັດຕັ້ງໃຫ້ມີໃນແຕ່ລະເຂດພື້ນທີ່ ເພື່ອຕອບສະໜອງຕໍ່ຄວາມຕ້ອງການຂອງທ້ອງຖິ່ນ. ຫຼັກສູດການຝຶກອົບຮົມຄວນເປັນຫຼັກສູດໄລຍະສັ້ນ (ສອງສາມອາທິດ ຫຼື ສອງສາມເດືອນ) ໂດຍເນັ້ນໃສ່ພາກປະຕິບັດໃຫ້ຫຼາຍຂຶ້ນ ເພື່ອໃຫ້ສາມາດນຳໄປປະຕິບັດຕົວຈິງໄດ້. ພ້ອມກັນນັ້ນ, ຕາຕະລາງການຮຽນ ກໍ່ຄວນປັບປ່ຽນໃຫ້ແທດເໝາະກັບຕົວຈິງ. ຕົວຢ່າງວ່າ ຖ້ານັກຮຽນໃນຫຼັກສູດ 4 ອາທິດ ພາຍຫຼັງຮຽນໄປໄດ້ 3 ອາທິດແລ້ວ ນັກຮຽນມີວຽກຈຳເປັນທີ່ຕ້ອງໂຈະການຮຽນ ກໍ່ຄວນອະນຸຍາດໃຫ້ໂຈະໄດ້ ແລ້ວສາມາດກັບຄືນມາຮຽນສືບຕໍ່ອາທິດທີ່ 4 ເພື່ອໃຫ້ຈົບຫຼັກສູດ. ນອກຈາກໃຫ້ຄວາມຮູ້ທັກສະດ້ານອື່ນແລ້ວ, ລະບົບການຝຶກອົບຮົມຄວນໃຫ້ຄວາມຮູ້ ແລະ ທັກສະແກ່ນັກຮຽນໃນດ້ານການດຳເນີນທຸລະກິດຂອງຕົນເອງ ເພື່ອໃຫ້ເຂົາເຈົ້າມີຄວາມສາ ມາດດຳເນີນທຸລະກິດຂອງຕົນເອງ ແລະ ເຮັດວຽກຮັບຈ້າງໄດ້. ການຈັດຕັ້ງຂະບວນການຝຶກອົບຮົມແນວນີ້ຈະບໍ່ເກີດຄ່າໃຊ້ຈ່າຍສູງ. ເປົ້າໝາຍຂອງການຝຶກອົບຮົມກໍ່ແມ່ນແນໃສ່ຊາວໜຸ່ມໃນຈຳນວນ 10,000-12,000 ຄົນຕໍ່ປີ. ປະເພດການຝຶກອົບຮົມອາດຈະປະກອບມີດັ່ງຕໍ່ໄປນີ້:

1. ສຳລັບການຝຶກອົບຮົມທີ່ຕ້ອງການນຳໃຊ້ເຄື່ອງມືກົນຈັກຈຳເປັນຕ້ອງສ້າງສູນຝຶກອົບຮົມຂຶ້ນ ເພື່ອສາມາດນຳໃຊ້ເປັນສູນບໍລິການ ແລະ ປະເມີນຄວາມຕ້ອງການດ້ານການຝຶກອົບຮົມພ້ອມທັງສ້າງລາຍຮັບນຳອີກດ້ວຍ.

2. ໃນບາງກໍລະນີທີ່ຜູ້ເຂົ້າຮ່ວມຝຶກອົບຮົມ ບໍ່ສາມາດມາຮັບການຝຶກຢູ່ໃນສູນໄດ້ (ຕົວຢ່າງ ຜູ້ທີ່ຢູ່ເຂດພູດອຍ, ຜູ້ທີ່ມີພາລະຕ້ອງເບິ່ງແຍງພໍ່ແມ່, ຜູ້ທີ່ບໍ່ສາມາດປະວຽກງານມາໄດ້ ແລະ ອື່ນໆ) ກໍ່ສາມາດຈັດການຝຶກອົບຮົມແບບເຄື່ອນທີ່ໃຫ້ເຂົາເຈົ້າໄດ້. ສິ່ງອຳນວຍໃນການຝຶກອົບຮົມນັ້ນ ສາມາດປະກອບໃສ່ໃນລົດບັນທຸກເຄື່ອນທີ່ໄປມາຕາມບ້ານ ຫຼື ເມືອງຕ່າງໆໄດ້ອີງຕາມຕະລາງເວລາທີ່ແຈ້ງໄວ້ກ່ອນແລ້ວ. ການຝຶກອົບຮົມໄລຍະສັ້ນແບບເຄື່ອນທີ່ ມີຜົນດີຕື່ມຢູ່ບ່ອນວ່າ ຄູຝຶກສາມາດຊອກເຫັນບັນຫາຕົວຈິງທີ່ທາງທ້ອງຖິ່ນຕ່າງໆປະສົບ ແລະ ທັງສາມາດເປັນຜູ້ຊ່ວຍແກ້ໄຂບັນຫາເຫຼົ່ານັ້ນໄປພ້ອມ, ແລະ.

3. ໃນການຝຶກອົບຮົມບາງຢ່າງເຊັ່ນການຝຶກອົບຮົມດ້ານການລ້ຽງສັດ, ການຜະລິດກະສິກຳແບບໃໝ່, ການປຸງແຕ່ງອາຫານ, ການຄ້າຂາຍຍ່ອຍ, ການບັນຊີ, ເປີດຮ້ານຂາຍເຄື່ອງ ແລະ ອື່ນໆເຫຼົ່ານີ້ ສາມາດນຳໃຊ້ ຄູຝຶກພຽງຄົນດຽວກໍ່ໄດ້.

ການເຊື່ອມຕໍ່ງານ (ຄ້າຍຄືກັບໜ່ວຍງານຈັດຫາງານ) ສຳລັບແຮງງານຮັບຈ້າງທົ່ວໄປ ແລະ ການເຂົ້າເຖິງສິນເຊື່ອເພື່ອດຳເນີນທຸລະກິດຂອງຕົນເອງກໍ່ແມ່ນປັດໄຈໜຶ່ງທີ່ສາມາດຊ່ວຍສ້າງວຽກເຮັດງານທຳໄດ້.

## ການເພີ່ມລາຍຮັບຂອງປະຊາຊົນ ໃນເຂດຊົນນະບົດ

ໃນປະຈຸບັນນີ້, ບັນຫາຄວາມ 'ກົດດັນໃນເຂດຊົນນະບົດ' ໂດຍສະເພາະໃນເຂດຫ່າງໄກຈາກຕົວເມືອງກຳລັງ ເລີ່ມມີປະກົດໃຫ້ເຫັນແຈ້ງຂຶ້ນ. ດັ່ງນັ້ນ, ກ່ອນທີ່ປະກົດການອັນນີ້ ຈະເກີດຂຶ້ນກັບເຂດຊົນນະບົດ ສິ່ງຈຳເປັນກໍ່ຄືຕ້ອງປະຕິບັດມາດຕະການຫຼຸດຜ່ອນ

ຄວາມກົດດັນນີ້ຢ່າງຮີບດ່ວນໂດຍເລີ່ມຕັ້ງແຕ່ດຽວນີ້ໄປໂລດ. ການປະຕິບັດມາດຕະການຫຼຸດຜ່ອນຄວາມກົດດັນນີ້ແມ່ນຮຽກຮ້ອງເຖິງການຈັດຫາອາຊີບການງານໃຫ້ຫຼາຍ ແລະ ມີຄ່າໃຊ້ຈ່າຍສູງຂຶ້ນ. ຫຼາຍປະເທດ ກຳລັງດຳເນີນການປະຕິຮູບ ລະບົບການກະສິກຳແບບພໍແຕ່ກຸ້ມກິນໂດຍ ເອົາໃຈໃສ່ປັບປຸງຂະແໜງກະສິກຳ ໄປຄຽງຄູ່ກັບການຊຸກຍູ້ສະໜັບສະໜູນຂະແໜງການ ທີ່ບໍ່ແມ່ນກະສິກຳ ແລະ ແກ້ໄຂບັນຫາສະເພາະໃນເຂດທີ່ຍັງບໍ່ມີການພັດທະນາໃນລະດັບຄົວເຮືອນ ແລະ ກຸ່ມປະຊາຊົນ. ບາງວິທີການທີ່ອາດແທດເໝາະກັບສະພາບຂອງລາວເຮົາມີດັ່ງນີ້:

### ແກ້ໄຂບັນຫາທີ່ດິນກະສິກຳ

1. ການອອກໃບຕາດິນ ເປັນການຊ່ວຍພັດທະນາຕະຫຼາດທີ່ດິນທີ່ມີຄວາມຈຳເປັນ ໃຫ້ແກ່ການສ້າງຄວາມທັນສະໄໝໃຫ້ແກ່ຂະແໜງກະສິກຳ. ລັດຖະບານລາວ ໄດ້ເລີ່ມຂະບວນການອອກໃບຕາດິນ ຫຼາຍປີຜ່ານມາແລ້ວ ແລະ ຄາດວ່າຈະສຳເລັດລົງໃນອີກ 15 ຫາ 20 ປີຕໍ່ໜ້າ ແລະ ບັນຫານີ້ຄວນເລັ່ງລັດຈັດຕັ້ງປະຕິບັດໃຫ້ສຳເລັດໂດຍໄວ. ການອອກໃບທະບຽນທີ່ດິນ ຄວນໃສ່ຊື່ຂອງຜົວ ແລະ ເມຍທີ່ເປັນເຈົ້າຂອງທັງສອງຊື່ຮ່ວມກັນ (ບໍ່ຄວນອອກແຕ່ຊື່ຜົວເທົ່ານັ້ນ).

2. ການຖືກຳມະສິດທີ່ດິນກະສິກຳ ຄວນໃຫ້ສົມເຫດສົມຜົນເພື່ອບໍ່ໃຫ້ເນື້ອທີ່ດິນນັ້ນຖືກຕັດແບ່ງເປັນຕອນ ນ້ອຍເກີນໄປໂດຍບໍ່ເກີດປະໂຫຍດໃຫ້ແກ່ເສດຖະກິດ. ສປປ ລາວ ສາມາດຖອດຖອນເອົາບົດຮຽນ ແລະ ປະສົບການໃນການຈັດສັນທີ່ດິນໃນຫຼາຍປະເທດ (ຕົວຢ່າງ ປະເທດຊີລີ, ອີຢິບ, ອິນເດຍ, ອີຣັກ, ຍີ່ປຸ່ນ, ເລບານອນ, ແມັກຊີໂກ, ເກົາຫຼີໃຕ້, ຊີເລຍ ແລະ ປະເທດອື່ນໆ) ເພື່ອມາກຳນົດນະໂຍບາຍທີ່ດິນໃຫ້ເໝາະສົມກັບປະເທດຕົນເອງໄດ້.

3. ນະໂຍບາຍທີ່ດິນ ຄວນກຳນົດກອບໃຫ້ຊັດເຈນ ເພື່ອປ້ອງກັນການສ້າງບັນຫາໃຫ້ແກ່ການທຳມາຫາກິນກໍ່ ຄືການດຳລົງຊີວິດຂອງປະຊາຊົນ ເຊັ່ນການສູນເສຍທີ່ດິນແບບບໍ່ເຕັມໃຈ ຫຼື ການຂາດທີ່ດິນ ຫຼື ການສູນເສຍທີ່ດິນແບບເຕັມໃຈຍ້ອນມີຂໍ້ມູນບໍ່ພຽງພໍ. ຕໍ່ກັບນະໂຍບາຍວ່າດ້ວຍການດຳລົງຊີວິດ, ການຈັດຕັ້ງປະຕິບັດເງື່ອນໄຂການຍົກຍ້າຍຈັດສັນທີ່ຢູ່ອາໄສກ່ອນການເວນຄືນທີ່ດິນ, ການປະເມີນສະພາບການດຳລົງຊີວິດໃນເຂດຍົກຍ້າຍຈັດສັນໃໝ່ ຫຼື ເຂດເຕົ້າໂຮມກຸ່ມບ້ານຄືນໃໝ່ເປັນປົກກະຕິ ແລະ ການຕິດຕາມກວດກາ ແລະ ປະເມີນຜົນທັງໝົດທີ່ກ່າວມານີ້ ລ້ວນແຕ່ມີຄວາມສຳຄັນຕໍ່ການຍົກຍ້າຍຈັດສັນບ້ານ ຫຼື ການເຕົ້າໂຮມກຸ່ມປະຊາຊົນຄືນໃໝ່.

### ເພີ່ມລາຍຮັບຈາກການຜະລິດກະສິກຳ

1. ການຫັນເອົາວຽກງານກະສິກຳໄປສູ່ຄວາມທັນສະໄໝ: ນຳໃຊ້ວັດຖຸດິບແບບໃໝ່ (ລວມທັງແນວພັນທີ່ມີຄຸນນະພາບ), ການເຂົ້າເຖິງລະບົບສິນເຊື່ອ, ການປູກພືດໝູນວຽນ, ການປູກພືດປະສົມປະສານ, ນຳໃຊ້ລະບົບການປູກຝັງແບບປະສົມປະສານ (ເຊັ່ນ ການປູກພືດ, ຕົ້ນໄມ້, ສວນປູກໄມ້ ແລະ ການລ້ຽງສັດປະ ສົມປະສານກັນ) ແລະ ການຮັບເອົາວິທີການປ່ຽນແປງໃໝ່ ກໍ່ຈະຊ່ວຍເຮັດໃຫ້ລາຍຮັບຈາກການຜະລິດກະສິກຳເພີ່ມຂຶ້ນໄດ້. ຄວນພິຈາລະນາເອົາການຊ່ວຍເຫຼືອພິເສດແກ່ຜູ້ຖືກຳມະສິດທີ່ດິນຂະໜາດນ້ອຍ, ຊາວນາແມ່ຍິງ ແລະ ກຸ່ມຊົນເຜົ່າມາເປັນບູລິມະສິດສຳຄັນ.

2. ການປັບປຸງຊົນລະປະທານທີ່ມີຄວາມຍືນຍົງທາງດ້ານລະບົບນິເວດ, ມີຄວາມສະເໝີພາບ ແລະ ມີສ່ວນຮ່ວມຈະເປັນປະໂຫຍດຫຼາຍ.

3. ການສົ່ງເສີມວຽກງານກະສິກຳ, ການບໍລິການໂດຍອາໄສຊຸມຊົນເປັນພື້ນຖານ, ລະບົບການຝຶກອົບຮົມ ແລະ ການຢ້ຽມຢາມ ແລະອື່ນໆໂດຍສະເພາະໃຫ້ແກ່ຊາວກະສິກອນຂະໜາດນ້ອຍໃນເຂດຫ່າງໄກ ແມ່ນປັດໄຈສຳຄັນທີ່ສຸດ.

4. ການຮັບປະກັນຕະຫຼາດຮອງຮັບ ແລະຮັບປະກັນລາຄາຍຸຕິທຳໃຫ້ແກ່ຊາວນາ ແມ່ນບູລິມະສິດສຳຄັນໃນ ອັນດັບຕົ້ນໆ. ການສົ່ງເສີມກຸ່ມຊາວກະສິກອນເພື່ອການຕໍ່ລອງລາຄາແບບລວມໝູ່, ການນຳໃຊ້ສື່ເອເລັກໂຕນິກ ເພື່ອຊອກຫາຂໍ້ມູນກ່ຽວກັບລາຄາ ແລະ ການເຮັດສັນຍາການຜະລິດ ແມ່ນບາງວິທີການທີ່ສາມາດນຳມາໝູນໃຊ້ໃນ ສປປ ລາວ ໄດ້.

*ໃນສະພາບເງື່ອນໄຂປະຈຸບັນ, ການເພີ່ມລາຍຮັບ ຈາກການປູກຝັງແບບຄອບຄົວ ຈະສາມາດຮັບປະກັນການສ້າງໃຫ້ມີການວຽກເຮັດງານທຳ ແລະ ຮັບປະກັນການກະຈາຍລາຍຮັບ, ຊັບສິນ ແລະ ທີ່ດິນ ແລະ ທັງເປັນການສ້າງຄວາມເຂັ້ມແຂງໃຫ້ແກ່ປະຊາຊົນໄດ້ດີກວ່າການທີ່ຈະໄປພັດທະນາສວນປູກໄມ້ຂະໜາດໃຫຍ່.*

### ເພີ່ມລາຍຮັບຈາກວຽກງານອື່ນນອກຈາກວຽກງານກະສິກຳ

ກ່ອນໜ້ານີ້ພວກເຮົາໄດ້ກ່າວເຖິງການສ້າງຄວາມເຂັ້ມແຂງໃຫ້ແກ່ວຽກງານນອກລະດູການກະສິກຳ ແລະ ວຽກງານທີ່ບໍ່ແມ່ນກະສິກຳ ໂດຍສະເພາະວຽກງານວິສາຫະກິດຈຸລະພາກ. ເຖິງຢ່າງໃດກໍ່ຕາມ, ແຮງງານທີ່ອາໄສເຮັດວຽກໃນຊົນນະບົດຈຳນວນຫຼວງຫຼາຍບໍ່ສາມາດດຳເນີນທຸລະກິດຂອງຕົນເອງໄດ້. ເຂົາເຈົ້າຕ້ອງພົບພໍ້ກັບບັນຫາການຫວ່າງງານຕາມລະດູການ ແລະ ບັນຫາຄວາມທຸກຍາກ ໂດຍສະເພາະໃນໄລຍະນອກລະດູການຜະລິດ. ການປະຕິບັດໂຄງການທີ່ສາມາດສ້າງວຽກເຮັດງານທຳໄດ້ ຫຼື ມີການຈ້າງແຮງງານທີ່ບໍ່ມີສີມືໃນລາຄາຕໍ່າສຸດຕາມຄວາມຕ້ອງການໃນໄລຍະທີ່ມີການຫວ່າງງານສູງເພື່ອເຮັດວຽກງານກໍ່ສ້າງໂຄງລ່າງຈະເປັນການໃຫ້ການຊ່ວຍເຫຼືອທາງສັງຄົມ ແລະ ທັງເປັນການປັບປຸງພື້ນຖານໂຄງລ່າງ ໃຫ້ແກ່ເຂດຊົນນະບົດໄປພ້ອມໆກັນ.

## ສົ່ງເສີມວຽກເຮັດງານທຳທີ່ດີມີຄຸນນະພາບ ໃຫ້ແກ່ແຮງງານໃນເຂດຕົວເມືອງ

1. ຄວນສ້າງລະບົບຂໍ້ມູນຂ່າວສານຕະຫຼາດແຮງງານ ເພື່ອສ້າງປະໂຫຍດໃຫ້ແກ່ 'ຂະແໜງວຽກທີ່ມີລາຍຮັບຕໍ່າ' ໃນຕະຫຼາດແຮງງານເຂດຕົວເມືອງ. ລະບົບດັ່ງກ່າວ ຄວນສະໜອງຂໍ້ມູນກ່ຽວກັບວຽກງານທີ່ມີໃນປະຈຸບັນ, ໂອກາດຝຶກອົບຮົມ, ທາງເລືອກໃນດ້ານວຽກເຮັດງານທຳ ແລະ ຂໍ້ມູນສຳຄັນອື່ນໆທີ່ຊ່ວຍໃນການຊອກວຽກເຮັດງານທຳ. ພ້ອມກັນນັ້ນ, ລະບົບກໍ່ຄວນມີຂໍ້ມູນສຳຄັນທີ່ເປັນປະໂຫຍດໃຫ້ແກ່ນາຍຈ້າງເຊັ່ນຂໍ້ມູນຂອງຜູ້ທີ່ກຳລັງຊອກຫາວຽກງານ.

2. ຄວນຈັດຕັ້ງໜ່ວຍງານໃຫ້ການບໍລິການດ້ານການສ້າງຕັ້ງທຸລະກິດ ທີ່ປະກອບອາຊີບອິດສະຫຼະ (ເຊັ່ນ ໃຫ້ຄຳແນະນຳກ່ຽວກັບການຊອກຫາແຫຼ່ງເງິນກູ້, ຈັດຝຶກອົບຮົມ, ຂໍ້ມູນກ່ຽວກັບຕະຫຼາດ, ເຕັກໂນໂລຊີ ແລະ ວິທີການສ້າງຕັ້ງທຸລະກິດ).

3. ການເສີມສ້າງທັກສະສີມືໃຫ້ແກ່ແຮງງານຢ່າງຮອບດ້ານ ແມ່ນສິ່ງທີ່ຈຳເປັນ ເພື່ອຊ່ວຍໃຫ້ແຮງງານສາມາດປັບປ່ຽນວຽກງານໄດ້ ໂດຍນຳໃຊ້ວິທີການທີ່ໄດ້ສະເໜີຢູ່ໃນພາກ 'ເພີ່ມຄວາມສາມາດໃນການຈ້າງງານດ້ວຍການສົ່ງເສີມທຶນມະນຸດ'.

4. ການປະກັນສັງຄົມ (ໂດຍສະເພາະລະບົບປະກັນສຸຂະພາບ) ແລະ ລະບົບອື່ນໆທີ່ຄ້າຍຄືກັນ ຈະສາມາດຫຼຸດຜ່ອນຄວາມຫຍຸ້ງຍາກໃຫ້ແກ່ແຮງງານໄດ້ໃນເວລາເຈັບເປັນ. ໃນປະເທດອື່ນ ເພິ່ນໄດ້ຈັດຕັ້ງການປະຕິບັດຮູບແບບການປະກັນສັງຄົມຈຸລະພາກມາກ່ອນແລ້ວ ແລະ ລາວເຮົາອາດຈະນຳເອົາຮູບແບບດັ່ງກ່າວນຳມາໃຊ້ກໍ່ໄດ້ແຕ່ຈະຕ້ອງໄດ້ຄົ້ນຄວ້າຂັ້ນຕອນການຈັດຕັ້ງປະຕິບັດຄັກແນ່.

5. ແຮງງານຮັບຈ້າງທົ່ວໄປ ຈະຕ້ອງມີສັນຍາແຮງງານເປັນລາຍລັກອັກສອນເພື່ອຫຼຸດຜ່ອນຄວາມສ່ຽງຂອງພວກເຂົາ. ກະຊວງແຮງງານ ແລະ ສະຫວັດດີການສັງຄົມ, ສະຫະພັນກຳມະບານລາວ ແລະ ໜ່ວຍງານອື່ນໆທີ່ກ່ຽວຂ້ອງ ຄວນເອົາໃຈໃສ່ເຜີຍແຜ່ໃຫ້ແຮງງານໄດ້ຮູ້ ແລະ ເຂົ້າໃຈເຖິງນະໂຍບາຍ, ລະບຽບການຂອງລັດຖະບານ ແລະ ສິດທິຕ່າງໆຂອງແຮງງານ.

## ການຈັດສັນແຮງງານລາວທີ່ໄປເຮັດວຽກຢູ່ຕ່າງປະເທດໃຫ້ເຂົ້າສູ່ລະບົບ

ເມື່ອພິຈາລະນາເຖິງຈຳນວນແຮງງານລາວທີ່ໄປເຮັດວຽກຢູ່ຕ່າງປະເທດແລະການປະກອບສ່ວນຂອງພວກເຂົາຕໍ່ເສດຖະກິດຂອງຊາດແລ້ວກໍ່ມີຢ່າງຫຼວງຫຼາຍ. ສະນັ້ນ, ຄວນເອົາໃຈໃສ່ໃຫ້ຄວາມສຳຄັນ ແລະ ປະຕິບັດນະໂຍບາຍຕໍ່ພວກເຂົາໃຫ້ເໝາະສົມ. ວິທີການຕ່າງໆດັ່ງຕໍ່ໄປນີ້ ແມ່ນໄດ້ນຳໃຊ້ໃນຫຼາຍປະເທດມາແລ້ວ ແລະ ຄວນນຳມາໝູນໃຊ້ໃຫ້ເໝາະສົມໃນລາວ:

1. ເຖິງແມ່ນວ່າ ອັດຕາສ່ວນແຮງງານເຄື່ອນຍ້າຍຈຳນວນຫຼວງຫຼາຍເປັນແຮງງານຜິດລະບຽບກົດໝາຍຂອງລາວກໍ່ຕາມ, ແຕ່ໃນນັ້ນ ຍັງມີແຮງງານຫຼາຍສົມຄວນ ທີ່ໄດ້ຈົດທະບຽນຖືກຕ້ອງກັບອຳນາດການ ປົກ ຄອງໃນປະເທດໄທ. ດັ່ງນັ້ນ, ຈຶ່ງມີຄວາມຈຳເປັນປັບປຸງຂອດການປະສານງານ ແລະ ຄວາມສອດຄ່ອງທາງດ້ານຂໍ້ກຳນົດ ແລະ ລະບຽບການເຄື່ອນຍ້າຍແຮງງານລະຫວ່າງສອງປະເທດໃຫ້ມີຄວາມກົມກືນກັນ. ພ້ອມກັນນັ້ນ, ກໍ່ຄວນພະຍາຍາມ ເຮັດໃຫ້ແຮງງານທີ່ໄປເຮັດວຽກຢູ່ຕ່າງປະເທດເຂົ້າສູ່ລະບົບຖືກຕ້ອງຕາມກົດໝາຍໃຫ້ຫຼາຍຂຶ້ນ ແລະ ອຳນາດການປົກຄອງຂອງລາວ ກໍ່ຄວນພິຈາລະນາຄືນໃໝ່ກ່ຽວກັບການປັບໃໝ ແຮງງານ ເຄື່ອນຍ້າຍ ໄປ ເຮັດວຽກຢູ່ຕ່າງປະເທດ ແບບຜິດກົດໝາຍ ທັງນີ້ກໍ່ເພາະວ່າເປົ້າໝາຍຂອງລັດຖະບານຄວນແມ່ນເພື່ອເຮັດໃຫ້ແຮງງານທີ່ເຄື່ອນຍ້າຍໄປເຮັດວຽກຕ່າງປະເທດ ໄດ້ຮັບຜົນປະໂຫຍດສູງສຸດ ບໍ່ແມ່ນເພື່ອລົງໂທດເຂົາເຈົ້າ ຈາກການເຄື່ອນຍ້າຍແຮງງານດັ່ງກ່າວ.

2. ເນື່ອງຈາກແຮງງານເລືອກທີ່ຈະນຳໃຊ້ຊ່ອງທາງໃນການເດີນທາງ ແລະ ການຫາວຽກເຮັດງານທຳທີ່ບໍ່ເປັນທາງການ (ເຖິງແມ່ນວ່າ ຈະເຕັມໄປດ້ວຍຄວາມສ່ຽງຕ່າງໆ ແຕ່ຊ່ອງທາງນີ້ ສາມາດເຮັດໄດ້ໄວກວ່າ, ມີຄ່າສິ້ນເປືອງໜ້ອຍກວ່າ ແລະ ສະດວກສະບາຍກວ່າ), ດັ່ງນັ້ນ ຄວນພິຈາລະນາ ເຮັດໃຫ້ບາງຊ່ອງທາງທີ່ບໍ່ເປັນທາງການນີ້ຖືກກົດໝາຍ ເພື່ອໃຫ້ສອດຄ່ອງກັບສະພາບການຕົວຈິງ. ການເຮັດໃຫ້ຊ່ອງທາງດັ່ງກ່າວຖືກກົດໝາຍ ອາດເຮັດໃຫ້ສາມາດນຳເອົາວິທີການທີ່ບໍ່ເປັນທາງການເຫຼົ່ານີ້ເຂົ້າສູ່ລະບົບລະບຽບການຂອງລັດໄດ້. ການໂອນເງິນກັບບ້ານສ່ວນໃຫຍ່ແມ່ນໂອນຜ່ານຊ່ອງທາງທີ່ບໍ່ເປັນທາງການເຫຼົ່ານີ້ຄືກັນ ຊຶ່ງມີຄ່າໃຊ້ຈ່າຍຖືກກວ່າ, ໄວກວ່າ ແລະ ສະດວກສະບາຍກວ່າ, ເຖິງວ່າຈະມີຄວາມສ່ຽງຈາກການລັກເງິນ ແລະ ອື່ນໆກໍ່ຕາມ. ການເຮັດໃຫ້ເສັ້ນທາງການໂອນເງິນແບບນີ້ເຂົ້າສູ່ລະບົບລະບຽບ ເປັນສິ່ງທີ່ສາມາດ ປະຕິບັດໄດ້ເຊັ່ນກັນ. ສ່ວນການເຕົ້າໂຮມຄືນນີ້ ບໍ່ຄວນຈະປະຕິບັດສະເພາະຕໍ່ກຸ່ມຜູ້ທີ່ຖືກເຄາະຮ້າຍຈາກ ການຄ້າມະນຸດເທົ່ານັ້ນ, ແຕ່ຄວນປະຕິບັດກັບແຮງງານລາວທັງໝົດ ທີ່ໄປເຮັດວຽກຢູ່ຕ່າງປະເທດ. ຢູ່ປະເທດອື່ນໆ ເພິ່ນໄດ້ນຳໃຊ້ບາງວິທີການໃນການສ້າງສິ່ງຈູງໃຈ ໃຫ້ແຮງງານທີ່ກັບຄືນປະເທດ ເຊັ່ນ ໃຫ້ການສະໜັບສະໜູນໃນການສ້າງຕັ້ງທຸລະກິດ, ສ້າງໂອກາດໃນການນຳໃຊ້ທັກສະສີມືຂອງພວກເຂົາ ແລະ ການຍົກເວັ້ນພາສີອາກອນ. ວິທີການເຫຼົ່ານີ້ ສາມາດນຳມາເປັນທາງເລືອກໃນການສຶກສາ ເພື່ອນຳມາໝູນໃຊ້ໃຫ້ແທດເໝາະກັບສະພາບເງື່ອນໄຂຂອງລາວໄດ້.

## ການລົງທຶນເພື່ອພັດທະນາຄົນ

ແຜນພັດທະນາເສດຖະກິດ-ສັງຄົມແຫ່ງຊາດ ຄັ້ງທີ VI ໄດ້ກຳນົດເອົາ 4 ວຽກງານຕົ້ນຕໍມາເປັນບູລິມະສິດເພື່ອສົ່ງເສີມການພັດທະນາຄົນຄື: ທຶນມະນຸດ, ສາທາລະນະສຸກ, ກະສິກຳ ແລະ ພື້ນຖານໂຄງລ່າງ. ບົດລາຍງານຂອງລັດຖະບານ ຊີ້ໃຫ້ເຫັນວ່າວຽກງານເຫຼົ່ານີ້ມີຄວາມຄືບໜ້າໄປຢ່າງສະໝ່ຳສະເໝີ. ແຕ່ວ່າການພັດທະນາ ມະນຸດຈະເກີດຜົນດີໄດ້ກໍ່ຕໍ່ເມື່ອວ່າ ລັດຖະບານ ຍັງເອົາໃຈໃສ່ໃນວຽກງານເຫຼົ່ານີ້ສືບຕໍ່ໄປໃນອະນາຄົດຂ້າງ ໜ້າ.

### ຕ້ອງຖືເອົາການສຶກສາຊັ້ນປະຖົມມາເປັນວຽກງານບຸລິມະສິດ

ການສຶກສາ, ທັກສະ, ຄຸນນະພາບຂອງວຽກງານ ແລະ ລາຍຮັບມີສາຍພົວພັນກັນສະໜິດແໜ້ນ, ແຕ່ຈະບໍ່ໄດ້ນຳມາສະເໜີຄືນອີກໃນພາກນີ້. ເປັນທີ່ເຂົ້າໃຈກັນດີຢູ່ແລ້ວວ່າ ໃນປະຈຸບັນນີ້ ລັດຖະບານລາວ ໄດ້ຈັດສັນງົບປະມານພຽງແຕ່ 3% ຂອງລວມຍອດຜະລິດຕະພັນພາຍໃນ ເຂົ້າໃນການພັດທະນາວຽກງານສຶກສາ. ລະດັບການໃຊ້ຈ່າຍດັ່ງກ່າວນີ້ຖືວ່າ ຕ່ຳກວ່າສອງເທົ່າຕົວ ຂອງລະດັບການໃຊ້ຈ່າຍເຂົ້າໃນການສຶກສາຊັ້ນປະຖົມຂອງ ປະເທດເກົາຫຼີໃຕ້, ມາເລເຊຍ ແລະ ບັນດາປະເທດອື່ນໆໃນອາຊີ ທີ່ປະສົບຜົນສຳເລັດໃນວຽກງານນີ້ມາແລ້ວ. ຄຽງຄູ່ກັບການຮັບປະກັນໃຫ້ ບັນລຸການໃຊ້ຈ່າຍເຂົ້າໃນການປັບປຸງການສຶກສາຊັ້ນມັດທະຍົມ, ການສຶກສາພາກເຕັກນິກວິຊາຊີບ ແລະ ການສຶກສາຊັ້ນສູງແລ້ວ ການເພີ່ມລາຍຈ່າຍເຂົ້າໃນວຽກງານການສຶກສາຊັ້ນປະຖົມກໍ່ເຫັນວ່າ ມີຄວາມຈຳເປັນຢ່າງຍິ່ງເພື່ອຕອບສະໜອງການສຶກສາຊັ້ນປະຖົມຢູ່ໃນລາວໃຫ້ທົ່ວເຖິງ.

ບາງຂັ້ນຕອນເພື່ອຮັບປະກັນໃຫ້ບັນລຸເປົ້າໝາຍການສຶກສາລະຊັ້ນປະຖົມແບບທົ່ວເຖິງໄດ້ມີດັ່ງລຸ່ມນີ້:

1. *ແກ້ໄຂບັນຫາການຂາດຄູ:* ການສອນຫ້ອງຄວບ ແມ່ນວິທີການ ທີ່ໄດ້ຮັບການຍອມຮັບກັນຢ່າງກວ້າງຂວາງ ເພື່ອຊ່ວຍແກ້ໄຂບັນຫາການຂາດຄູ. ວິທີການດັ່ງກ່າວນີ້ ແມ່ນການນຳໃຊ້ຄູພຽງຄົນດຽວສອນຫຼາຍກວ່າ 1 ຊັ້ນຮຽນ ແລະ ຫຼາຍກວ່າ

ວິຊາດຽວ ຊຶ່ງສ່ວນໃຫຍ່ແລ້ວ ແມ່ນປະຕິບັດຢູ່ໃນຫ້ອງຮຽນຫ້ອງດຽວ ແລະ ໃນເວລາດຽວກັນ. ເນື່ອງຈາກຄູທີ່ດຳເນີນການສິດສອນດ້ວຍວິທີນີ້ ຕ້ອງໃຊ້ຫຼາຍທັກສະໄປພ້ອມໆກັນ ຈຶ່ງຈຳເປັນຕ້ອງມີການຈັດຝຶກອົບຮົມສະເພາະ. ເພື່ອເປັນການສ້າງແຮງຈູງໃຈ ໃຫ້ແກ່ຄູໃນການນຳໃຊ້ວິທີການນີ້ ຄວນມີວິທີການກະຕຸກຊຸກຍູ້ຈູງໃຈເປັນພິເສດເຊັ່ນ ການຈ່າຍເງິນເພີ່ມ, ການໃຫ້ໂອກາດເລື່ອນຂັ້ນໄວຂຶ້ນ, ໃຫ້ໂອກາດທາງເລືອກເພື່ອສ້າງຄວາມກ້າວໜ້າອື່ນໆແກ່ເຂົາເຈົ້າຫຼັງຈາກການສອນຫ້ອງຄວບ, ໃຫ້ທີ່ພັກອາໄສ ແລະ ອື່ນໆ. ເພື່ອເປັນການຊຸກຍູ້ສະໜັບສະໜູນການສອນຫ້ອງຄວບ, ໂຮງຮຽນສາມາດເລືອກເອົາຊາວບ້ານທີ່ໄດ້ຮັບການສຶກສາ (ຜູ້ທີ່ຮຽນເຖິງຊັ້ນມັດທະຍົມຕອນຕົ້ນ ແລະ ຕອນປາຍ ຄືຮຽນຮອດຫ້ອງ 7-8) ເຂົ້າມາຊ່ວຍ ໂດຍສະເພາະໃນການແປພາສາໃນທ້ອງຖິ່ນທີ່ນຳໃຊ້ພາສາຊົນເຜົ່າຂອງຕົນເອງ.

2. *ເພີ່ມອັດຕາການເຂົ້າຮຽນ ແລະ ອັດຕາການລອດເຫຼືອ:* ນັກຮຽນຫຼາຍຄົນ ຮຽນບໍ່ທັນໝູ່ ໃນດ້ານທັກສະ ການວິເຄາະ ແລະ ຄິດໄລ່ເລກ ແລະ ເຮັດໃຫ້ເຂົາເຈົ້າຕ້ອງປະລະໂຮງຮຽນໄປ. ເພື່ອແກ້ໄຂບັນຫາດັ່ງກ່າວຫຼາຍປະເທດໄດ້ຈັດຕັ້ງລະບົບ 'ການຮຽນບຳລຸງຄືນ' ກໍ່ຄືຈັດຕັ້ງຫ້ອງຮຽນພິເສດ, ຈັດຕັ້ງຫ້ອງຮຽນເຊື່ອມຕໍ່ ແລະ ຊັບຊ້ອນໃຫ້ນັກຮຽນກັບຄືນເຂົ້າຮຽນໃນລະບົບ. ການຮຽນບຳລຸງຄືນນີ້ ອາດສາມາດນຳມາປະຕິບັດທົດລອງໄດ້. ພ້ອມດຽວກັນນັ້ນ, ໂຄງການອາຫານກາງເວັນກໍ່ແມ່ນວິທີການໜຶ່ງທີ່ຈະຊ່ວຍໃຫ້ນັກຮຽນບໍ່ມີບັນຫາຫິວເຂົ້າ ແລະ ເຮັດໃຫ້ສະໝອງຂອງນັກຮຽນ ມີຄວາມປອດໂປ່ງຢູ່ເລື້ອຍໆ. ອົງການອາຫານໂລກ (WFP) ໄດ້ປະຕິບັດໂຄງການໃຫ້ອາຫານກາງເວັນໃນໂຮງຮຽນບາງແຫ່ງໃນແຂວງພາກເໜືອຂອງລາວມາແລ້ວ.

3. *ການຮ່ວມມືກັນ:* ການສ້າງຄວາມເຂັ້ມແຂງໃຫ້ແກ່ສະມາຄົມຄູ-ພໍ່ແມ່ນັກຮຽນ ແລະ ການຂະຫຍາຍການຮ່ວມມືກັບພາກເອກະຊົນ ໃນວຽກງານການສຶກສາສະເພາະດ້ານ ເປັນສິ່ງທີ່ມີຄວາມສຳຄັນ ເພື່ອເພີ່ມອັດຕາການເຂົ້າຮຽນ ແລະ ການລອດເຫຼືອຂອງນັກຮຽນ .

4. *ມາດຕະຖານ:* ການສ້າງໂຮງຮຽນສາທິດທົດລອງ ອາດຈະຊ່ວຍເຮັດໃຫ້ການຮຽນເລກ, ພາສາ ແລະ ວິຊາ ອື່ນໆ ມີຄຸນນະພາບດີຂຶ້ນ ເພື່ອຊ່ວຍຍົກລະດັບມາດຕະຖານຂອງການສຶກສາໃນລະດັບສູງ.

5. *ອື່ນໆ:* ສາມາດຈັດຕັ້ງທົດລອງຫ້ອງສະໝຸດເຄື່ອນທີ່ໃນຂັ້ນບ້ານ.

## ການປັບປຸງສຸຂະພາບຂອງປະຊາຊົນກໍ່ເໝືອນກັນ...

ສຸຂະພາບ ແລະ ການເຮັດວຽກງານ ແມ່ນສອງປັດໄຈທີ່ມີສາຍພົວພັນກັນແໜ້ນ. ລັດຖະບານ ຄວນຈັດສັນງົບປະມານເພີ່ມເຂົ້າໃນວຽກງານສາທາລະນະສຸກ ຈາກລະດັບປະຈຸບັນ ທີ່ມີໜ້ອຍກວ່າ 1% ຂອງລວມຍອດຜະລິດຕະພັນພາຍໃນ ໃຫ້ໄດ້ຢ່າງໜ້ອຍສຸດ 2-3% ຊຶ່ງເປັນລະດັບທີ່ຫຼາຍປະເທດໃຊ້ຈ່າຍ ແລະ ປັບປຸງຂະແໜງການສາທາລະນະສຸກໄດ້ດີ. ສະນັ້ນ, ເພື່ອຊ່ວຍຫຼຸດຜ່ອນບັນຫາດ້ານສຸຂະພາບ ຈຶ່ງໄດ້ນຳສະເໜີບາງວິທີການ ດັ່ງລຸ່ມນີ້ຄື:

1. ຄວນເອົາໃຈໃສ່ຕໍ່ວຽກງານໂພຊະນາການ ແລະ ສຸຂະພາບຂອງເດັກນ້ອຍໃນແຂວງຈຸດສຸມ (ໂດຍສະເພາະແຂວງທີ່ມີອັດຕາການຕາຍຂອງເດັກນ້ອຍເກີດໃໝ່ເພີ່ມຂຶ້ນ) ເປັນພິເສດ. ຈະຕ້ອງດຳເນີນການສຳຫຼວດສະເພາະໃນແຂວງເຫຼົ່ານີ້. ພ້ອມກັນນັ້ນ, ກໍ່ອາດທົດລອງສ້າງລະບົບການຕິດຕາມສຸຂະພາບ ຊຶ່ງໄດ້ປະຕິບັດກັນມາໃນຫຼາຍປະເທດໃນອາຊີ ເພື່ອໃຫ້ສາມາດຕິດຕາມຜົນຄວາມຄືບໜ້າຕ່າງໆ ໃນຂະແໜງການນີ້.

2. ໜຶ່ງໃນວິທີການທີ່ໃຊ້ງົບປະມານໜ້ອຍທີ່ສຸດ ແຕ່ມີປະສິດຕິພາບ ໃຫ້ແກ່ສຸຂະພາບຫຼາຍກວ່າໝູ່ ແມ່ນການສະໜອງນ້ຳດື່ມສະອາດ. ວຽກງານນີ້ ສາມາດເຮັດໄດ້ຫຼາຍວິທີໂດຍບໍ່ເກີດຄ່າໃຊ້ຈ່າຍເລີຍ ເຊັ່ນ ການໃຊ້ພະລັງງານແສງອາທິດ. ເຖິງແມ່ນວ່າ ການປັບປຸງວຽກງານສຸຂະພາບ ຈະມີຄວາມສັບສົນໄປຫຼາຍກວ່າການສະໜອງນ້ຳສະອາດກໍ່ຕາມແຕ່ສະພາບແວດລ້ອມທີ່ປາດສະຈາກເຊື້ອພະຍາດ ແລະ ຈຸລິນຊີ ແມ່ນຈຸດເລີ່ມຕົ້ນທີ່ດີ ສຳລັບການປັບປຸງສຸຂະພາບ. ສຳລັບວິທີການອື່ນໆທີ່ບໍ່ມີຄ່າສິ້ນເປືອງຫຼາຍໃນການສະໜອງນ້ຳສະອາດໂດຍ ໃຊ້ພະລັງງານແສງອາທິດ ສາມາດເບິ່ງໄດ້ໃນເວັບໄຊ http://www.sodis.ch

3. ຄວນໃຫ້ການສົ່ງເສີມໂຄງການສົ່ງເສີມໂພຊະນາການໃນໂຮງຮຽນທີ່ໄດ້ກ່າວມາໃນເບື້ອງຕົ້ນແລ້ວ.

## ນອກຈາກນັ້ນ ກໍ່ຄວນສ້າງຄວາມສະເໝີພາບລະຫວ່າງແຕ່ລະພາກຕ່າງໆ....

ບັນດາດັດຊະນີໝາຍດ້ານການພັດທະນາມະນຸດ, ຄວາມທຸກຍາກດ້ານມະນຸດ ແລະ ລາຍຮັບ ສະແດງໃຫ້ເຫັນວ່າ ແຂວງອັດຕະປື, ຜົ້ງສາລີ, ເຊກອງ, ຫົວພັນ ແລະ ອຸດົມໄຊ ແມ່ນຢູ່ໃນລະດັບຕ່ຳສຸດ. ແຂວງເຫຼົ່ານີ້ຕັ້ງຢູ່ຫ່າງໄກສອກຫຼີກ, ທີ່ຕັ້ງພູມສັນຖານເປັນພູດອຍປະກອບໄປດ້ວຍປະຊາຊົນຫຼາຍຊົນເຜົ່າອາໄສຢູ່. ນອກຈາກນັ້ນ, ໃນໄລຍະທົດສະວັດຜ່ານມາບາງແຂວງເຊັ່ນ ສະຫວັນນະເຂດ, ຄຳມ່ວນ, ຈຳປາສັກ ແລະ ໄຊຍະບູລີ ກໍ່ມີລະດັບການພັດທະນາມະນຸດຫຼຸດລົງ. ປັດໄຈເຫຼົ່ານີ້ຊີ້ໃຫ້ເຫັນວ່າການພັດທະນາໃນບາງເຂດຂອງແຂວງ ເຫຼົ່ານີ້ ຍັງເຮັດບໍ່ໄດ້ດີຄືກັບເຂດອື່ນໆ. ພ້ອມດຽວກັນນັ້ນ, ຊ່ອງຫວ່າງລະຫວ່າງຕົວເມືອງ ແລະ ຊົນນະບົດທາງດ້ານພື້ນຖານໂຄງລ່າງ ແລະ ຊີວິດການເປັນຢູ່ ກໍ່ຍັງຢູ່ໃນລະດັບກວ້າງ. ຊ່ອງຫວ່າງເຫຼົ່ານີ້ຈະຕ້ອງໄດ້ຮັບການແກ້ໄຂ ບໍ່ພຽງແຕ່ເພື່ອເຫດຜົນເຮັດໃຫ້ເກີດຄວາມຍຸຕິທຳ ແລະ ຄວາມດຸ່ນດ່ຽງທາງເສດຖະກິດເທົ່ານັ້ນ ແຕ່ຫາກຍັງເປັນການເຮັດໃຫ້ມີຄວາມໝັ້ນຄົງທາງສັງຄົມນຳອີກດ້ວຍ. ດັ່ງນັ້ນ, ການລົງທຶນຂອງພາກລັດ ຄວນສຸມໃສ່ບັນດາແຂວງເປົ້າໝາຍເຫຼົ່ານີ້ໃຫ້ຫຼາຍຂຶ້ນ ແລະ ຕ້ອງມີນະໂຍບາຍພິເສດເພື່ອດຶງດູດເອົາການລົງທຶນຂອງພາກເອກະຊົນພາຍໃນ ແລະ ຕ່າງປະເທດເຂົ້າມາໃນບັນດາແຂວງດັ່ງກ່າວ.

## ມາດຕະການລິເລີ່ມທາງດ້ານນະໂຍບາຍ- ແຜນວາດລວມ

| | ບັນຫາ | ສະຖານະການປະຈຸບັນ | ການລິເລີ່ມ |
|---|---|---|---|
| 1 | ຄວາມຫຼາກຫຼາຍທາງດ້ານເສດຖະກິດຍັງຕໍ່າ | ອຸດສາຫະກຳທີ່ບໍ່ເຂັ້ມງານມີການພັດທະນາໄວ ແຕ່ມີການສ້າງວຽກເຮັດງານທຳໜ້ອຍ | - ປະກາດໃຊ້ກົດໝາຍວິສາຫະກິດ, ອອກດຳລັດຂອງນາຍົກວ່າດ້ວຍທຸລະກິດຂະໜາດນ້ອຍ ແລະ ກາງ<br>- ຂະແໜງທຸລະກິດຂະໜາດນ້ອຍ ແລະ ກາງ ຫຼື ຂະແໜງການເອກະຊົນຍັງບໍ່ພັດທະນາໄປໄດ້ດີເທົ່າທີ່ຄວນ |
| 2 | ການຂາດແຄນວຽກ, ຄວາມທຸກຍາກ, ຄວາມບໍ່ສະເໝີພາບ, ແລະ ການຂາດສິດໃນເຂດຊົນນະບົດ. | - ຄວາມກົດດັນທາງດ້ານ ປະຊາກອນເຮັດໃຫ້ອັດຕາຂອງດິນ/ເຄື່ອງປ່າຂອງດົງຕໍ່ຫົວຄົນຫຼຸດລົງ, ການເຄື່ອນຍ້າຍຂອງແຮງງານພາຍໃນປະເທດເຮັດໃຫ້ໂຄງສ້າງປະຊາກອນປ່ຽນ,<br>- ບັນຫາຄວາມບໍ່ສົມບູນຂອງຕະຫຼາດ,<br>- ຜະລິດຕະພາບໃນການໃຊ້ດິນຍັງຕໍ່າ,<br>- ຊາວກະສິກອນບາງຄົນຕ້ອງຂາດອາຊີບທຳມາຫາກິນຍ້ອນມາດຕະການໃນການຟື້ນຟູຄືນຊີວິດການເປັນຢູ່ຂອງເຂົາເຈົ້າຍັງບໍ່ພຽງພໍ. | - ການຈັດຕັ້ງປະຕິ ບັດວຽກງານໃບຕາດິນຍັງມີຄວາມຊັກຊ້າ<br>- ຕະຫຼາດທີ່ດິນບໍ່ມີ ການພັດທະນາ ຢ່າງເປັນລະບົບ<br>- ວຽກງານສົ່ງເສີມກະສິກຳຍັງຈຳກັດ<br>- ບໍ່ມີມາດຕະການສຸກເສີນເພື່ອຮອງຮັບໃນການສູນເສຍທີ່ດິນ |
| 3 | ໂອກາດໃນການເຮັດວຽກນອກຂະແໜງກະສິກຳບໍ່ຫຼາຍ (ຊົນນະບົດ ແລະ ຕົວເມືອງ) | - ການເຮັດວຽກໃນຂະແໜງການທີ່ບໍ່ແມ່ນກະສິກຳແມ່ນວຽກງານເສີມໃຫ້ແກ່ວຽກກະສິກຳແບບພໍແຕ່ກຸ້ມກິນ | - ກົດໝາຍວ່າດ້ວຍທຸລະກິດຂະໜາດນ້ອຍ ແລະ ຂະໜາດກາງໄດ້ຮັບການອະນຸມັດຜ່ານແລ້ວແຕ່ຂະແໜງການຈຸລະພາກບໍ່ແມ່ນ ທຸລະກິດຂະໜາດນ້ອຍ ແລະ ຂະໜາດກາງ |
| 4 | ແຮງງານທີ່ເຮັດ 'ວຽກໃນລະດັບຕໍ່າ' ຢູ່ໃນເຂດຕົວເມືອງບໍ່ໄດ້ວຽກທີ່ດີ | - ຄວາມບໍ່ແນ່ນອນໃນການເຮັດວຽກ, ຄ່າຈ້າງຕໍ່າ, ການຫວ່າງງານ, ສະພາບແວດລ້ອມການເຮັດວຽກບໍ່ດີ<br>- ການເຂົ້າເຖິງຕະຫຼາດບໍ່ເປັນລະບົບຄືຜ່ານສາຍພົວພັນແບບພີ່ນ້ອງ;<br>- ມີການປ່ຽນວຽກໃນສາຍຕັ້ງໄດ້ໜ້ອຍ | - ກົດໝາຍແຮງງານບໍ່ໃຫ້ການຄຸ້ມຄອງແຮງງານທຸກຄົນ<br>- ການປະຕິບັດກົດໝາຍຍັງຢູ່ໃນລະດັບຕໍ່າ<br>- ບໍ່ມີແຜນພັດທະນາສຳລັບ 'ວຽກຂັ້ນຕໍ່າ' |
| 5 | ເຖິງວ່າແຮງງານທີ່ໄປເຮັດວຽກຢູ່ຕ່າງປະເທດໄດ້ ປະກອບສ່ວນຕໍ່ປະເທດຊາດກໍ່ ຕາມແຕ່ພວກເຂົາກໍ່ຍັງບໍ່ໄດ້ຮັບ ການຍອມຮັບເທົ່າທີ່ຄວນ | - ອາດມີແຮງງານທີ່ໄປເຮັດວຽກຢູ່ຕ່າງປະເທດເຖິງປະມານ 220,000 ຄົນ<br>- ເຖິງແມ່ນວ່າເຂົາເຈົ້າປະກອບສ່ວນປະມານ 7% ເຂົ້າໃນ ລວມຍອດຜະລິດຕະພັນພາຍໃນ ໃນຮູບແບບຂອງເງິນໂອນກັບບ້ານກໍ່ຕາມ ແຕ່ເຂົາເຈົ້າຍັງບໍ່ໄດ້ຮັບການປົກປ້ອງ ແລະ ຍັງຖືກເອົາປຽບຢູ່ | ການເດີນທາງ, ການເຂົ້າເຖິງວຽກງານ, ການໂອນເງິນ ແລະ ອື່ນໆ ເຖິງແມ່ນຈະມີສົນທິສັນຍາລະຫວ່າງປະເທດແລ້ວຕໍ່ຕາມ ແຕ່ກໍ່ຍັງບໍ່ເປັນລະບົບ ແລະ ບໍ່ມີຄວາມປອດໄພ. |
| 6 | ລະດັບທຶນມະນຸດໃນຂະແໜງການນອກກະສິກຳຍັງຕໍ່າ | - ອັດຕາການຮູ້ໜັງສື ແລະ ຈຳນວນປີການສຶກສາສະເລ່ຍຍັງຕໍ່າ.<br>- ຄວາມຮູ້ທາງເຕັກນິກຍັງອ່ອນ<br>- ລະບົບການສຶກສາເຕັກນິກ ແລະ ວິຊາຊີບຍັງບໍ່ໄດ້ຮັບການສົ່ງເສີມເທົ່າທີ່ຄວນ, ຄ່າໃຊ້ຈ່າຍແພງ ແລະ ດັດປັບບໍ່ໄດ້<br>- ຄວາມສາມາດໃນການຈ້າງງານນອກຈາກວຽກກະສິກຳຍັງຕໍ່າ | - ກະຊວງສຶກສາທິການໄດ້ສຳເລັດຍຸດທະສາດການປະຕິຮູບການສຶກສາ.<br>- ແນໃສ່ຍົກລະດັບໂຮງຮຽນມູນລະປະຖົມມາເປັນໂຮງຮຽນປະຖົມສົມບູນ<br>- ກະຊວງສຶກສາໄດ້ດຳເນີນການປັບປຸງຄຸນນະພາບ ແລະ ຂະຫຍາຍໂອກາດການເຂົ້າຮຽນ ການສຶກສາເຕັກນິກ ແລະ ວິຊາຊີບ |
| 7 | ຕິດຕາມກວດກາ ການພັດທະນາມະນຸດ ຫຼື ທຸລະກິດຂະໜາດຍ່ອຍ ແລະ ກາງ ທີ່ຍັງບໍ່ເຂັ້ມແຂງ | ການລາຍງານສ່ວນໃຫຍ່ຍັງຈຳກັດຢູ່ແຕ່ໃນກອບການໃຊ້ຈ່າຍທີ່ເກີດຂຶ້ນ, ການລາຍງານລະດັບກົມຈຳນວນໜຶ່ງ ແລະ ຕົວຢ່າງ ຈາກການສຳຫຼວດຍັງມີຈຳກັດ | ປະຈຸບັນນີ້, ແຫຼ່ງຂໍ້ມູນ ພຽງແຫຼ່ງດຽວທີ່ມີກໍ່ຄືປຶ້ມສະຖິຕິບ້ານ ແລະ ກຸ່ມບ້ານ (ໃນບາງເຂດ) ແຕ່ຄຸນນະພາບຍັງບໍ່ສູງ |

**ບັນຫາລວມທີ່ສຳຄັນ:** ໂຄງການພັດທະນາຕ້ອງແນໃສ່ລະດັບຄົວເຮືອນ ແລະ ບຸກຄົນ (ບໍ່ແມ່ນສະເພາະແຕ່ເຂດ), ບັນຫາຊົນເຜົ່າ ແລະ ບົດບາດຍິງຊາຍຕ້ອງຖືເປັນສິ່ງສຳຄັນ ແລະ ການປະຕິບັດການໃດໆເພື່ອແກ້ໄຂບັນຫາລວມນີ້ຕ້ອງໃຫ້ມີລັກສະນະຍືນຍົງ, ມີຄວາມສະເໝີພາບ ແລະ ທັງເປັນການສ້າງຄວາມເຂັ້ມແຂງໃຫ້ແກ່ປະຊາຊົນ.

## ວິທີການແກ້ໄຂທີ່ເປັນໄປໄດ້

- ການລົງທຶນຂອງລັດເຂົ້າໃນຂະແໜງການ ແລະ ເຂດຕ່າງໆ ຄວນມີການສົມດູນກັນຫຼາຍຂຶ້ນ.
- ສົ່ງເສີມໃຫ້ຂະແໜງການເຂັ້ມງານໃຫ້ມີການຂະຫຍາຍໂຕ
- ສະໜັບສະໜູນຂະແໜງການປິ່ນອ້ອມຂອງອຸດສາຫະກຳບໍ່ແຮ່ ແລະ ໄຟຟ້າ ດ້ວຍການສົ່ງເສີມພາກເອກະຊົນພາຍໃນ
- ສົ່ງເສີມທຸລະກິດຂະໜາດນ້ອຍ ແລະ ກາງ ພາກເອກະຊົນພາຍໃນເຂົ້າໃນທຸກຂະແໜງການ
- ໃຫ້ຄົນໃນທ້ອງຖິ່ນມີສ່ວນຮ່ວມໃນກິດຈະກຳສະໜັບສະໜູນແກ່ຂະແໜງບໍ່ແຮ່ ເຊັ່ນ ການສະໜອງອາຫານ, ການຂົນສົ່ງ ແລະ ສ້ອມແປງ ແລະ ອື່ນໆ.
- ຈັດການຝຶກອົບຮົມກັບທີ່ໃນໂຄງການໃຫຍ່ ຫຼື ເຕັກໂນໂລຊີສູງ
- ສ້າງຕັ້ງສູນຝຶກອົບຮົມ ແລະ ສະຖາບັນຄົ້ນຄວ້າບໍ່ແຮ່ ແລະ ທໍລະນີສາດ.

- ຄວນເຮັດໃຫ້ເປົ້າໝາຍການອອກໃບຕາດິນໃຫ້ສຳເລັດລົງໄວຕື່ມ
- ຫຼີກເວັ້ນການແບ່ງປັນຕອນດິນອອກເປັນຕອນນ້ອຍເກີນໄປ ເພື່ອໃຫ້ເກີດປະໂຫຍດດ້ານເສດຖະກິດ
- ນະໂຍບາຍທີ່ດິນຕ້ອງຄຳນຶງເຖິງຄວາມລະອຽດອ່ອນຕໍ່ການສູນເສຍທີ່ດິນຂອງຊາວກະສິກອນໃຫ້ຫຼາຍຂຶ້ນ
- ການຫັນເອົາພາກກະສິກຳໄປສູ່ຄວາມທັນສະໄໝ, 'ລະບົບການຜະລິດກະສິກຳ', ການຊ່ວຍເຫຼືອພິເສດແກ່ເຈົ້າຂອງດິນລາຍນ້ອຍ, ຊາວກະສິກອນແມ່ຍິງ ແລະ ພື້ນທີ່ຫ່າງໄກສອກຫຼີກ
- ການຕະຫຼາດຜະລິດຕະພັນກະສິກຳທີ່ດີ (ນຳໃຊ້ຫຼາຍວິທີການ ລວມທັງການນຳໃຊ້ເຄື່ອງມືເອເລັກໂຕຣນິກ ແລະ ອື່ນໆ ເພື່ອຊອກຫາຂໍ້ມູນລາຄາທີ່ດີໃຫ້ແກ່ຊາວກະສິກອນ)
- ສ້າງໂຄງການຈ້າງງານແຮງງານຮັບຈ້າງ ຕາມຄວາມຕ້ອງການເພື່ອສະໜອງແຮງງານຮັບຈ້າງທີ່ບໍ່ຕ້ອງການສີມືແຮງງານເພື່ອກໍ່ສ້າງ ພື້ນຖານໂຄງລ່າງໃນໄລຍະທີ່ມີການຫວ່າງງານສູງ

- ຈົດທະບຽນທຸກແຮງງານທີ່ປະກອບອາຊີບອິດສະຫຼະ, ນຳໃຊ້ສິ່ງອຳນວຍຄວາມສະດວກທົ່ວໄປຮ່ວມກັນ ແລະ ອື່ນໆ.
- ສົ່ງເສີມກິດຈະກຳທີ່ບໍ່ແມ່ນກະສິກຳ ແລະ ກິດຈະກຳນອກລະດູກະສິກຳ ແລະ ທຸລະກິດຂະໜາດນ້ອຍ (ໃນພາກເອກະຊົນ) ດ້ວຍການປ່ອຍເງິນກູ້, ການຊ່ວຍເຫຼືອດ້ານວິຊາການ, ການຮ່ວມໃຊ້ສິ່ງອຳນວຍຄວາມສະດວກຕ່າງໆຂອງຊຸມຊົນ, ການສົ່ງເສີມການເຂົ້າເຖິງຕະຫຼາດ
- ຈັດຝຶກອົບຮົມໃຫ້ແກ່ຊາວໜຸ່ມ: ຫຼັກສູດໄລຍະສັ້ນໃນຂະແໜງທີ່ມີໂອກາດໃນການມີວຽກເຮັດງານທຳສູງ
- ດຳເນີນການຄົ້ນຄວ້າເພື່ອຫາຫົນທາງສົ່ງເສີມຂະແໜງການທີ່ບໍ່ແມ່ນກະສິກຳ, ຂະແໜງການນອກກະສິກຳ

- ສ້າງຕັ້ງລະບົບຂໍ້ມູນຂ່າວສານຕະຫຼາດແຮງງານສຳລັບ 'ຂະແໜງ ທີ່ມີລາຍຮັບຕໍ່າ'
- ຄວບຄຸມໃຫ້ແຮງງານມີສັນຍາແຮງງານໃຫ້ ຫຼາຍຂຶ້ນເພື່ອຫຼຸດຜ່ອນຄວາມສ່ຽງຕ່າງໆ
- ລົງໄປເຖິງແຮງງານເພື່ອເຜີຍແຜ່ໃຫ້ເຂົາເຈົ້າຮູ້ກ່ຽວກັບນະໂຍບາຍຂອງລັດຖະບານ, ກົດລະບຽບ ແລະ ສິດທິຂອງເຂົາເຈົ້າ, ຄ່າຈ້າງຂັ້ນຕ່ຳ ພ້ອມດ້ວຍແນະນຳໃຫ້ປະຕິບັດຕາມກົດໝາຍ
- ພິຈາລະນາທາງເລືອກກ່ຽວກັບການປະກັນໄພໃຫ້ແກ່ແຮງງານ ໂດຍສະເພາະການປະກັນສຸຂະພາບ
- ພະຍາຍາມເອົາໃຈໃສ່ພິເສດໃນການສ້າງຄວາມເຂັ້ມແຂງໃຫ້ແກ່ແຮງງານທີ່ປະກອບອາຊີບອິດສະຫຼະ (ຈຳເປັນໃຫ້ມີການຄົ້ນຄວ້າຕື່ມ)

- ໃຫ້ການປຶກສາທາງກົດໝາຍແກ່ແຮງງານໃຫ້ໄດ້ຫຼາຍທີ່ສຸດ
- ເຮັດໃຫ້ຂັ້ນຕອນຕ່າງໆມີຄວາມສະດວກຂຶ້ນ ແລະ ຄ່າສິ້ນເປືອງໃນການເດີນທາງຫຼຸດລົງ, ການເຂົ້າເຖິງວຽກງານ ແລະ ລະບຽບການອື່ນໆ.
- ຫັນເອົາໜ່ວຍງານກ່ຽວກັບການເດີນທາງ ແລະ  ການໂອນເງິນກັບບ້ານທີ່ບໍ່ເປັນລະບົບນັ້ນເຂົ້າສູ່ລະບົບຖືກຕ້ອງຕາມກົດໝາຍ
- ຊ່ວຍເຫຼືອແຮງງານທີ່ກັບຄືນມາດ້ວຍວິທີການເຕົ້າໂຮມເຂົາເຈົ້າເຂົ້າສູ່ລະບົບວຽກງານເສດຖະກິດຂອງລາວ, ສະໜອງສິ່ງຈູງໃຈໃຫ້ແກ່ແຮງງານທີ່ກັບຄືນບ້ານ ເຊັ່ນ ສິ່ງອຳນວຍຄວາມສະດວກໃນການເລີ່ມຈັດຕັ້ງທຸລະກິດ, ນຳໃຊ້ທັກສະສີມືແຮງງານຂອງພວກເຂົາໃຫ້ເກີດປະໂຫຍດ ແລະ ປະຕິບັດນະໂຍບາຍຍົກເວັ້ນພາສີອາກອນແກ່ເຂົາເຈົ້າ
- ເພີ່ມໜ່ວຍງານຮັບເງິນຝາກ ແລະສ້າງຄວາມເຂັ້ມແຂງໃຫ້ແກ່ການປ່ອຍສິນເຊື່ອຂັ້ນບ້ານ

- ການສຶກສາຊັ້ນປະຖົມ: ໃຊ້ລະບົບການສອນຫ້ອງຄວບ, ສ້າງຕັ້ງກຸ່ມໂຮງຮຽນ, ສ້າງສິ່ງຈູງໃຈໃຫ້ຄູອາຈານ ແລະ ສົ່ງເສີມການສອນຫ້ອງຄວບໂດຍລະດົມເອົາຊາວໜຸ່ມທີ່ມີການສຶກສາ ອົບຮົມດີມາຊ່ວຍ ໃນການແປພາສາຊົນເຜົ່າໃນບາງເຂດ, ປະຕິບັດການຮຽນບຳລຸງເພີ່ມໃຫ້ແກ່ນັກຮຽນທີ່ຮຽນບໍ່ທັນໝູ່, ຂະຫຍາຍໂຄງການອາຫານກາງເວັນທີ່ອົງການອາຫານໂລກໄດ້ປະຕິບັດມາ ແລະ ປັບປຸງສະມາຄົມພໍ່ແມ່ນັກຮຽນ-ຄູ ໃຫ້ມີຄວາມເຂັ້ມແຂງ ແລະ ອື່ນໆ
- ມາດຕະຖານ: ສ້າງຕັ້ງໂຮງຮຽນສາທິດ: ກຳນົດມາດຕະຖານການຮຽນເລກ ແລະ ພາສາ
- ການສຶກສາເຕັກນິກ 1: ປັບປຸງການສຶກສາເຕັກນິກ-ວິຊາຊີບ: ເພີ່ມຄຸນນະພາບ, ຮ່ວມມືກັບສາກົນ, ສາມາດປັບປ່ຽນໃຫ້ເຂົ້າກັບສະພາບ, ມີການຄັດເລືອກນັກຮຽນຢ່າງສົມເຫດສົມຜົນ ແລະ ຫຼຸດຄ່າຮຽນລົງ.
- ການສຶກສາເຕັກນິກ 2: ຈັດຕັ້ງການຝຶກອົບຮົມໄລຍະສັ້ນໃຫ້ແກ່ຊາວໜຸ່ມທີ່ມີລາຍຮັບ ແລະ ການສຶກສາຕ່ຳ, ຈັດກອງປະຊຸມຝຶກອົບຮົມໃນເຂດຕ່າງໆຫຼາຍແຫ່ງໃກ້ກັບເຂດທີ່ຢູ່ຂອງນັກຮຽນ, ກະຈາຍຈຸດຄັດເລືອກນັກຮຽນລົງສູ່ທ້ອງຖິ່ນ, ຈຳນວນຜູ້ເຂົ້າຮ່ວມ ການຝຶກອົບຮົມສະເລ່ຍ 10,000 ຫາ 12,000 ຄົນຕໍ່ປີ
- ທຶນມະນຸດອື່ນໆ: ລິເລີ່ມການສະສົມທຶນມະນຸດໃນຂະແໜງການ ຕ່າງໆທີ່ປະຕິບັດກັນມາ ເຊັ່ນ ການພັດທະນາທຸລະກິດ, ການພັດທະນາຊຸມຊົນ ແລະ ອື່ນໆ
- ວຽກງານສຸຂະພາບ: ການລິເລີ່ມປັບປຸງການສະໜອງນ້ຳສະອາດໂດຍສະເພາະ

ຕ້ອງຕິດຕາມກວດກາ ຕົວຊີ້ບອກທາງດ້ານການພັດທະນາມະນຸດໃນລະດັບທ້ອງຖິ່ນ, ປັບປຸງການເກັບກຳຂໍ້ມູນໃນລະດັບທ້ອງຖິ່ນ (ໂດຍສະເພາະປຶ້ມສະຖິຕິຂັ້ນບ້ານ)

ຫົວຂໍ້ການສຶກສາເພື່ອເຂົ້າໃຈບັນຫາກ່ຽວກັບການພັດທະນາມະນຸດໃຫ້ໄດ້ດີຂຶ້ນ: ການຈ້າງງານນອກຂະແໜງກະສິກຳ ຫຼື ນອກລະດູການຜະລິດກະສິກຳ, ເດັກນ້ອຍແມ່ຍິງ, ຊົນເຜົ່າ, ການເຮັດໃຫ້ຕະຫຼາດທີ່ດິນກະສິກຳໃນເຂດຊົນນະບົດມີການເໜັງຕີງ ແລະ ຄວາມແຕກໂຕນຂອງການພັດທະນາໃນແຕ່ລະເຂດ.

*ແນວຄວາມຄິດເພີ່ມເຕີມ:*

*ໃນໄລຍະການປັບປຸງບົດລາຍງານສະບັບນີ້ ເປັນໄລຍະທີ່ບັນຫາວິກິດການຂອງໂລກກຳລັງກໍ່ຕົວຂຶ້ນ ແລະ ອາດສົ່ງຜົນກະທົບໃຫ້ແກ່ເສດຖະກິດຂອງປະເທດໃນເຂດອາຊີຕາເວັນອອກສ່ຽງໃຕ້. ເນື່ອງຈາກວ່າ ລະດັບການເຊື່ອມໂຍງເສດຖະກິດຂອງລາວເຮົາ ເຂົ້າກັບເສດຖະກິດຂອງໂລກ ຍັງບໍ່ທັນສູງເທົ່າທີ່ຄວນ ຈຶ່ງເປັນການຍາກທີ່ຈະປະເມີນ ຫຼື ຄາດຄະເນໄດ້ຢ່າງຊັດເຈນເຖິງຜົນກະທົບທີ່ອາດຈະເກີດຂຶ້ນຕໍ່ ສປປ ລາວ. ແຕ່ໂດຍລວມແລ້ວ, ການສົ່ງອອກ, ການລົງທຶນຂອງຕ່າງປະເທດ, ຜົນກຳໄລຂອງການຮ່ວມລົງທຶນ (ຕົວຢ່າງ ການປະຕິບັດໂຄງການບໍ່ແຮ່), ການຫຼັ່ງໄຫຼອອກໄປເຮັດວຽກຢູ່ຕ່າງປະເທດ ຂອງແຮງງານລາວ ແລະ ທຶນຊ່ວຍເຫຼືອຈາກສາກົນ ອາດຈະຫຼຸດລົງເລັກໜ້ອຍ ແລະ ຈະສົ່ງຜົນກະທົບບໍ່ດີຕໍ່ວຽກເຮັດງານ ທຳ ແລະ ເຮັດໃຫ້ບາງແນວຄວາມຄິດທີ່ສະເໜີມາຂ້າງເທິງນັ້ນ ຍັງບໍ່ທັນສາມາດນຳໄປຈັດຕັ້ງປະຕິບັດໄດ້. ເພື່ອຮັບມືກັບສະພາບດັ່ງກ່າວ, ລັດຖະບານ ຄວນດຳເນີນມາດຕະການທີ່ເໝາະສົມ ເພື່ອປົກປ້ອງພາກສ່ວນສັງຄົມລາວທີ່ໄດ້ຮັບຜົນກະທົບ ແລະ ມີຄວາມສ່ຽງສູງເຊັ່ນ: ພາກສ່ວນແຮງງານໃນໂຮງງານຕັດຫຍິບທີ່ຖືກປົດປ່ອຍອອກເພື່ອຫຼຸດຜ່ອນຄ່າສິ້ນເປືອງ, ແຮງງານທີ່ກັບມາຈາກການໄປເຮັດວຽກຢູ່ຕ່າງປະເທດ ແລະ ອື່ນໆ.*

*ແຫຼ່ງຂໍ້ມູນ*

*ບົດລາຍງານສະບັບນີ້ ນຳໃຊ້ຫຼາຍຂໍ້ມູນທີ່ມີຢູ່ຂອງລັດຖະບານ ເຊັ່ນ: ຂໍ້ມູນການສຳຫຼວດພົນລະເມືອງປີ 1995 ແລະ 2005, ການສຳຫຼວດການໃຊ້ຈ່າຍ ແລະ ການຊົມໃຊ້ໃນຄົວເຮືອນ (1992-93, 1997-98, 2002-03 ແລະ 2007-08), ການສຳຫຼວດເສດຖະກິດປີ 2006, ແລະ ວາລະສານອື່ນໆ ຈາກອົງການຈັດຕັ້ງ ຕ່າງໆຂອງລັດຖະບານ. ນອກຈາກນີ້, ເພື່ອເຮັດໃຫ້ຖານຂໍ້ມູນມີຄວາມໜັກແໜ້ນຂຶ້ນ ກໍ່ຍັງໄດ້ດຳເນີນການສຳຫຼວດເບື້ອງຕົ້ນ ຄົວເຮືອນ 2,043 ແຫ່ງໃນ 6 ແຂວງ ເຂດຊົນນະບົດ, ແຮງງານທີ່ມີລາຍໄດ້ຕໍ່າ 800 ຄົນໃນ 4 ແຂວງ, ການສຳພາດດ້ານຄຸນນະພາບ ກັບແຮງງານທີ່ໄປເຮັດວຽກຢູ່ປະເທດໄທ ໃນ 6 ບ້ານ ຂຶ້ນກັບ 3 ແຂວງ ແລະ ການສຶກສາວິໄຈໂຮງຮຽນວິຊາຊີບ 7 ແຫ່ງ ທີ່ໄດ້ສຳພາດ ໃນປີ 2007-2008.*

# ບົດທີ 1:

## ພາກສະເໜີ



## ບົດທີ 1:

# ພາກສະເໜີ

‘ສະພາບການຂອງປະເທດເຮົາໃນປະຈຸບັນ ບໍ່ອະນຸຍາດໃຫ້ພົນລະເມືອງລາວນິ້ງນອນໃຈຢູ່ໄດ້... ຊາວໜຸ່ມລາວ ຈະຕ້ອງພ້ອມກັນສຸມທຸກເຫື່ອແຮງສະຕິປັນຍາ ແລະ ຫົວຄິດປະດິດສ້າງຂອງຕົນ ເຂົ້າໃນພາລະກິດສ້າງ ສາພັດທະນາປະເທດຊາດໃຫ້ມີຄວາມເຂັ້ມແຂງ’.

**ປະທານ ໄກສອນ ພົມວິຫານ**

## ຈຸດປະສົງ

ສປປ ລາວ ເປັນປະເທດທີ່ບໍ່ມີທາງອອກສູ່ທະເລ, ມີລາຍຮັບຕໍ່າ, ປະຊາຊົນສ່ວນໃຫຍ່ ຍັງດໍາລົງຊີວິດດ້ວຍ ການຜະລິດກະສິກໍາເພື່ອການລ້ຽງຊີບ ແລະ ກິດຈະກໍາອື່ນໆທີ່ກ່ຽວພັນກັນ. ການທີ່ລາວເຮົາມີເສດຖະກິດ ທີ່ອາໄສການຜະລິດກະສິກໍານັ້ນ ບໍ່ແມ່ນບັນຫາຕົ້ນຕໍ, ແຕ່ບັນຫາຄວາມກົດດັນຈາກການເພີ່ມຂຶ້ນຂອງຈໍານວນປະຊາກອນ ແລະ ການເຊື່ອມໂຍງເສດຖະກິດ ແລະ ສັງຄົມເຂົ້າກັບໂລກພາຍນອກ ກໍາລັງເຮັດໃຫ້ເກີດການປ່ຽນແປງໄປຢ່າງໄວວາ, ການປ່ຽນແປງການນໍາໃຊ້ທີ່ດິນ ແລະ ຊັບພະຍາກອນ ແລະ ການປ່ຽນແປງວິຖີການດໍາລົງຊີວິດຂອງປະຊາຊົນ. ປະຊາຊົນສ່ວນໃຫຍ່ ຍັງຂາດຄວາມພ້ອມໃນການປ່ຽນແປງຈາກການດໍາລົງຊີວິດ ດ້ວຍການຜະລິດກະສິກໍາເພື່ອການລ້ຽງຊີບ ແລະ ທາງພາກລັດເອງ ກໍ່ມີອົງການຈັດຕັ້ງຈໍານວນໜຶ່ງເທົ່ານັ້ນ ທີ່ມີຄວາມພ້ອມໃນການນໍາພາຂະບວນການປ່ຽນແປງດັ່ງກ່າວ ໃຫ້ມີຄວາມສະເໝີພາບ ແລະ ທົ່ວເຖິງ. ດັ່ງນັ້ນ, ສະພາບຄວາມບໍ່ແນ່ນອນໃນວຽກເຮັດງານທໍາ, ການເສຍວຽກງານ, ຄວາມບໍ່ສະເໝີພາບ ແລະ ຄວາມທຸກຍາກ ຈຶ່ງເປັນບັນຫາທີ່ຈະຕ້ອງໄດ້ພ້ອມກັນເອົາໃຈໃສ່ແກ້ໄຂໂດຍສະເພາະໃນເຂດຊົນ ນະບົດ. ແຮງງານຈໍານວນໜຶ່ງເຖິງວ່າຈະໄດ້ເຮັດວຽກໃນພາກອຸດສາຫະກໍາ ແລະ ການບໍລິການກໍ່ດີ ແຕ່ວຽກສ່ວນຫຼາຍ ກໍ່ບໍ່ໄດ້ຮັບການປົກປ້ອງດ້ວຍກົດໝາຍ ແລະ ມີຄ່າແຮງງານຕໍ່າ. ພ້ອມກັນນັ້ນ, ແຮງງານຈໍານວນໜຶ່ງ ກໍ່ໄດ້ເຄື່ອນຍ້າຍໄປເຮັດວຽກຢູ່ປະເທດໄທ ຊຶ່ງສ່ວນໃຫຍ່ແລ້ວແມ່ນບໍ່ເປັນທາງການ.

ບົດລາຍງານສະບັບນີ້ ມີຈຸດປະສົງປະເມີນສະພາບວຽກເຮັດງານທໍາ ແລະ ການດໍາລົງຊີວິດຂອງແຮງງານໃນທົ່ວປະເທດ ເພື່ອສະເໜີແນະນະໂຍບາຍ ທີ່ຈະຊ່ວຍສ້າງເງື່ອນໄຂອໍານວຍ ໃຫ້ແກ່ການສ້າງວຽກເຮັດງານທໍາທັງທາງດ້ານປະລິມານ ແລະ ຄຸນນະພາບໃຫ້ຫຼາຍຂຶ້ນ ແລະ ເຕົ້າໂຮມເອົາແຮງງານຈໍານວນຫຼວງຫຼາຍເຂົ້າສູ່ລະບົບວຽກງານໃນຂະແໜງການຕົ້ນຕໍຂອງເສດຖະກິດ. ເນື່ອງຈາກວ່າ ການເພີ່ມຄຸນນະພາບຂອງວຽກງານມີ ການພົວພັນເຖິງການຈ້າງງານ ແລະ ການພັດທະນາເສດຖະກິດທີ່ມີຈຸດສຸມໃສ່ຄົນທຸກຍາກ, ດັ່ງນັ້ນ ບົດລາຍງານສະບັບນີ້ ຈຶ່ງໄດ້ຍົກເອົາປະເດັນຕ່າງໆທີ່ພົວພັນເຖິງຂະບວນການພັດທະນາເສດຖະກິດ ແລະ ການແຊກຄຸມໃນຕະຫຼາດແຮງງານຂຶ້ນມາສະເໜີຄຽງຄູ່ກັນໄປ. ການສຶກສາວິໄຈໃນບົດລາຍງານສະບັບນີ້ ໄດ້ຍົກໃຫ້ເຫັນ 3 ກຸ່ມແຮງງານຕົ້ນຕໍຄື: ແຮງງານໃນພາກກະສິກໍາ (ແລະ ກິດຈະກໍາທີ່ກ່ຽວຂ້ອງ), ແຮງງານທີ່ມີລາຍຮັບຕໍ່າໃນເຂດຕົວເມືອງ ແລະ ແຮງງານທີ່ໄປເຮັດວຽກຢູ່ປະເທດໄທ.

ຄວາມພະຍາຍາມໃນການເຕົ້າໂຮມເອົາແຮງງານຈໍານວນຫຼາຍເຂົ້າມາມີສ່ວນຮ່ວມໃນຂະບວນການພັດທະນາປະເທດຊາດ ແລະ ຮັບປະກັນໃຫ້ເຂົ້າເຈົ້າມີອາຊີບໝັ້ນຄົງ ຖືເປັນວຽກງານທີ່ສໍາຄັນໃນແຜນພັດທະນາຂອງລັດຖະບານ. ດັ່ງນັ້ນ, ຈຶ່ງເຊື່ອແນ່ວ່າ ຜົນການສຶກສາວິໄຈຂອງບົດລາຍງານສະບັບນີ້ ຈະເປັນປະໂຫຍດໃຫ້ແກ່ການປັບປຸງກອບນະໂຍບາຍຂອງລັດໃຫ້ມີຄວາມເຂັ້ມແຂງຂຶ້ນ.

## ເນື້ອໃນຂອງບົດລາຍງານການສຶກສາຄົ້ນຄວ້າ

ສປປ ລາວ ບໍ່ແມ່ນປະເທດທີ່ມີແຮງງານເຫຼືອ ແຕ່ສິ່ງທີ່ໜ້າເປັນຫ່ວງກໍ່ແມ່ນຄຸນນະພາບຂອງແຮງງານ ໂດຍສະເພາະໃນເຂດຊົນນະບົດກໍ່ຄືໃນທົ່ວປະເທດ. ພົນລະເມືອງລາວຈໍານວນຫຼາຍທັງຍິງ ແລະ ຊາຍ ຍັງຍຶດຖືອາຊີບທໍາການຜະລິດກະສິກໍາແບບພໍແຕ່ກຸມກິນ ແລະ ການດໍາລົງຊີວິດຂອງເຂົາເຈົ້າ ແມ່ນຂຶ້ນກັບກິດຈະກໍາເສີມຕ່າງໆ. ມາດຕະຖານຊີວິດການເປັນຢູ່ຂອງເຂົາເຈົ້າ ຈັດຢູ່ໃນລະດັບຕໍ່າຫາປານກາງ ຊຶ່ງນະໂຍບາຍການເປີດກ້ວາງເສດຖະກິດ ໄດ້ເຮັດໃຫ້ປະຊາຊົນໃນຫຼາຍທ້ອງຖິ່ນ ຕ້ອງໄດ້ແຂ່ງຂັນກັບພາກສ່ວນອື່ນໆໃນການນໍາໃຊ້ຊັບພະຍາກອນທໍາມະຊາດ. ການເພີ່ມຂຶ້ນຢ່າງໄວວາຂອງພົນລະເມືອງລາວເຮັດໃຫ້ບັນຫານີ້ຍິ່ງເພີ່ມທະວີຂຶ້ນ. ຍ້ອນຄວາມພະຍາຍາມຂອງ ລັດຖະບານ ໃນການຍຸດຕິການຖາງປ່າເຮັດໄຮ່ ເຮັດໃຫ້ການຜະລິດກະສິກໍາແບບນີ້ຫຼຸດລົງຫຼາຍແລ້ວ, ແຕ່ໃນໄລຍະທີ່ຜ່ານມານີ້ການຖາງປ່າເຮັດໄຮ່ກໍ່ຍັງເກີດມີຂຶ້ນຢູ່ໃນບາງທ້ອງຖິ່ນ. ບາງທ້ອງຖິ່ນ ຍັງບໍ່ສາມາດປ່ຽນແປງວິທີການທໍາມາຫາກິນ ຈາກການຜະລິດກະສິກໍາແບບພໍແຕ່ກຸ້ມກິນ ໄປເປັນກິດຈະກໍາອື່ນໄດ້ຢ່າງງ່າຍດາຍ ເນື່ອງຈາກຄວາມເຂົ້າໃຈ ຕໍ່ກັບທາງເລືອກໃນການທໍາມາຫາກິນແບບອື່ນຍັງມີຄວາມຈໍາກັດ ຍ້ອນເຫດຜົນທີ່ໄດ້ຍົກຂຶ້ນມາເວົ້າເລື້ອຍໆກໍ່ຄື: ລະດັບການສຶກສາຕໍ່າ, ທັດສະນະຄະຕິ ແລະ ຄວາມຊິນເຄີຍກັບແບບແຜນການດໍາລົງຊີວິດທີ່ອາໄສການຜະລິດກະສິກໍາ ແບບພໍແຕ່ກຸ້ມກິນ ແລະ ຄວາມຈໍາກັດໃນວຽກງານສົ່ງເສີມກະສິກໍາ. ແຮງງານຈໍານວນຫຼາຍ ປ່ຽນຮູບແບບການທໍາມາຫາກິນ ໂດຍເຄື່ອນຍ້າຍຈາກບ້ານ ໄປເຮັດວຽກງານທີ່ໃຊ້ທັກສະສີມືບໍ່ສູງ ເພື່ອຫາເງິນໃນລະດັບປານກາງ. ເນື່ອງຈາກວ່າ ອັດຕາການຂະຫຍາຍໂຕຂອງພົນລະເມືອງໄວຂຶ້ນໃນໄລຍະຊຸມປີ1980 ແລະ 1990 ສົ່ງຜົນໃຫ້ຈໍານວນພົນ ລະເມືອງໃນເກນອາຍຸອອກແຮງງານນັ້ນເພີ່ມສູງຂຶ້ນ. ສະນັ້ນ, ສະພາບການ

**ຮູບສະແດງ 1.1: ຜະລິດຕະພາບແຮງງານໃນຂະແໜງກະສິກຳ, ອຸດສາຫະກຳ ແລະ ການບໍລິການ, ປີ 1995 ແລະ 2005**




***ແຫຼ່ງຂໍ້ມູນ:*** *ການສຳຫຼວດພົນລະເມືອງ ປີ 1995 ແລະ 2005, EC06 ແລະ ຂໍ້ມູນລາຍໄດ້ແຫ່ງຊາດ: ລັດຖະບານລາວ (1997); ລັດຖະບານລາວ (2006ກ); ລັດຖະບານລາວ (2007ຄ); ແລະ ລັດຖະບານລາວ (2007ກ).*

ຫາວຽກເຮັດງານທຳໃນຕໍ່ໜ້າ ອາດຈະມີຄວາມຫຍຸ້ງຍາກຫຼາຍຂຶ້ນ (ລາຍລະອຽດໃນກ່ອງທີ 1.1).

ເຖິງແມ່ນວ່າ ລາຍຮັບຂອງປະເທດ ໄດ້ມີການຂະຫຍາຍໂຕສູງໃນລະດັບ 6.3% ຕໍ່ປີ ໃນລະຫວ່າງປີ 1992 ແລະ 2007 ກໍ່ຕາມ, ແຕ່ວ່າຂະແໜງການທີ່ມີການຂະຫຍາຍໂຕດີ ຊໍ້າພັດຍັງບໍ່ໄດ້ສ້າງວຽກເຮັດງານທຳພາຍໃນໄດ້ໃນລະດັບສູງ ແລະ ກົງກັນຂ້າມມີບົດລາຍງານຫຼາຍສະບັບຊີ້ໃຫ້ເຫັນວ່າ ຂະແໜງການທີ່ຂະຫຍາຍໂຕໄວເຫຼົ່ານີ້ຊໍ້າພັດຈ້າງເອົາກຸ່ມແຮງງານຕ່າງປະເທດເຂົ້າມາເຮັດວຽກເປັນຈຳນວນຫຼວງຫຼາຍ. ການຂະຫຍາຍໂຕຂອງພາກອຸດສາຫະກຳ ທີ່ເປັນຂະແໜງການເຂັ້ມທຶນ ໄດ້ເຮັດໃຫ້ມີຊ່ອງຫວ່າງຄວາມແຕກໂຕນກັນຢ່າງຫຼວງຫຼາຍ ລະຫວ່າງ ຕົວເມືອງ-ຊົນນະບົດ, ຂະແໜງການ ແລະ ພາກສ່ວນອື່ນໆ. ດັ່ງທີ່ສະແດງ ໃນຮູບສະແດງ 1.1 ລະດັບຜະລິດຕະພາບແຮງງານ ໃນຂະແໜງການທີ່ບໍ່ແມ່ນກະສິກຳ ສູງກວ່າ ຂະແໜງກະສິກຳ ເຖິງ 4 - 10 ເທົ່າຕົວ ແລະ ລະດັບຄວາມແຕກຕ່າງດັ່ງກ່າວນີ້ ຍັງບໍ່ມີການປ່ຽນແປງໃນຊ່ວງໄລຍະປີ 1995 ຫາ 2005. ແຮງງານຈຳນວນຫຼວງຫຼາຍທີ່ເຂົ້າມາເຮັດວຽກໃນຕົວເມືອງ ກໍ່ບໍ່ໄດ້ເຮັດວຽກດີຕາມຄວາມມຸ້ງຫວັງເທົ່າທີ່ຄວນ. ສະພາບເງື່ອນໄຂໃນການເຮັດວຽກຂອງເຂົາເຈົ້າ ກໍ່ຄືກຸ່ມແຮງງານທີ່ໄປເຮັດວຽກຢູ່ຕ່າງປະເທດເປັນ ບັນຫາທີ່ຕ້ອງຍົກຂຶ້ນມາເວົ້າກັນຢູ່ເລື້ອຍໆ ເຊັ່ນ ເຂົາເຈົ້າເຮັດວຽກຫຼາຍຊົ່ວໂມງຕິດຕໍ່ກັນ ແຕ່ໄດ້ຮັບຄ່າແຮງຕໍ່າ ແລະ ແຮງງານສ່ວນໃຫຍ່ທີ່ກ່າວມານີ້ ກໍ່ລ້ວນແຕ່ຕົກຢູ່ໃນສະພາບຂາດຄວາມແນ່ນອນ. ສ່ວນແຮງງານທີ່ໄປເຮັດວຽກໃນຕ່າງປະເທດ ສ່ວນໃຫຍ່ກໍ່ແມ່ນໄປແບບຜິດກົດໝາຍ. ດັ່ງນັ້ນ, ເຂົາເຈົ້າຈຶ່ງບໍ່ໄດ້ຮັບການປົກປ້ອງ ຈາກກົດໝາຍ, ມີຄວາມສ່ຽງຕໍ່ການຖືກປັບໃໝ ແລະ ຖືກເອົາປຽບເອົາລັດດ້ວຍຮູບການຕ່າງໆນາໆ.

ການມີວຽກເຮັດງານທຳ ສ່ອງແສງເຖິງການນຳໃຊ້ຄວາມອາດສາມາດຂອງຄົນໃຫ້ເກີດປະໂຫຍດ ຊຶ່ງໃນນັ້ນບໍ່ສະເພາະແຕ່ແຮງງານແຕ່ຍັງລວມໄປເຖິງຄວາມຄ່ອງແຄ້ວຊຳນານງານ ແລະ ຫົວຄິດປະດິດສ້າງນຳອີກດ້ວຍ. ພ້ອມກັນນັ້ນ, ການມີວຽກເຮັດງານທຳ ບໍ່ສະເພາະແຕ່ເປັນການເປີດໂລກະທັດ ແລະ ກະຈາຍລາຍໄດ້ເທົ່ານັ້ນ ແຕ່ຫາກຍັງເປັນການສົ່ງເສີມໃຫ້ຄົນເຂົ້າໄປມີສ່ວນຮ່ວມໃນສັງຄົມ ແລະ ເສດຖະກິດຫຼາຍຂຶ້ນ. ການມີວຽກເຮັດງານທຳທີ່ມີຜົນຕອບແທນດີຍັງເປັນການສົ່ງເສີມສຸຂະພາບ ແລະການສຶກສາຂອງຜູ້ອອກແຮງງານ ແລະ ຄອບຄົວຂອງເຂົາເຈົ້າໃຫ້ດີຂຶ້ນ. ການມີວຽກເຮັດງານທຳ ຖືເປັນເຄື່ອງມືອັນແຫຼມຄົມ ໃນການຊ່ວຍສ້າງຄວາມທະນົງໃຈໃນກຽດສັກສີຂອງຄວາມເປັນຄົນ. ອົງການແຮງງານສາກົນ ໄດ້ມີແຜນການສົ່ງເສີມ 'ວຽກດີມີຄຸນນະພາບ' ນັບຕັ້ງແຕ່ທ້າຍຂອງຊຸມປີ 90 ເປັນຕົ້ນມາ.ສິ່ງສຳຄັນທີ່ສຸດ ກໍ່ຄືແຜນການສົ່ງເສີມວຽກທີ່ດີມີຄຸນນະພາບ ກໍ່ແມ່ນເພື່ອສ້າງວຽກເຮັດງານທຳໃຫ້ຫຼາຍຂຶ້ນ ຊຶ່ງແຜນການນີ້ໄດ້ລະບຸເຖິງການຍຶດໝັ້ນຕໍ່ມາດຕະຖານແຮງງານ, ການໃຫ້ຄ່າຕອບແທນເໝາະສົມ, ການສົ່ງເສີມຄວາມໝັ້ນຄົງທາງສັງຄົມ ແລະ ໃຫ້ໂອກາດໃນການແລກປ່ຽນຄວາມຄິດເຫັນລະຫວ່າງ ຜູ້ອອກແຮງງານ ແລະ ລະຫວ່າງລູກຈ້າງ, ນາຍຈ້າງ ແລະ ລັດຖະບານ. ດ້ວຍເຫດນັ້ນ, ຢູ່ໃນແຜນການຂອງ ອົງການແຮງງານສາກົນ ຈຶ່ງໄດ້ມີຄວາມເຫັນພ້ອມ ແລະ ການຮັບຮອງຕໍ່ສາຍພົວພັນສຳຄັນ ລະຫວ່າງ ການຈ້າງງານ ແລະ ການສ້າງຄວາມເຂັ້ມແຂງໃຫ້ແກ່ປະຊາຊົນ, ຄຸນນະພາບຊີວິດທີ່ດີທີ່ເປັນອົງປະກອບສຳຄັນຂອງການພັດທະນາມະນຸດ[1].

ມະຕິຂອງກອງປະຊຸມໃຫຍ່ຂອງພັກຄັ້ງທີ VIII ມີເປົ້າໝາຍເຮັດໃຫ້ ສປປ ລາວ ຫຼຸດພົ້ນອອກຈາກສະຖານະພາບຂອງປະເທດດ້ອຍພັດທະນາ ພາຍໃນປີ 2020[2] ແລະ ແຜນພັດທະນາເສດຖະກິດ-ສັງ

1 ອົງການແຮງງານສາກົນ ILO (1999), ໜ້າ 7

2 ເບິ່ງເອກະສານ GOL (2006b). ຍຸດທະສາດການເຕີບໂຕ ແລະ ຫຼຸດຜ່ອນຄວາມທຸກຍາກແຫ່ງຊາດ (NGPES) ຊຶ່ງໃນເມື່ອກ່ອນສ້າງຂຶ້ນເພື່ອເຮັດໜ້າທີ່ດັ່ງກ່າວ ແຕ່ປະຈຸບັນແມ່ນໄດ້ເຊື່ອມສານເຂົ້າກັບແຜນພັດທະນາເສດຖະກິດ ແລະ ສັງຄົມແຫ່ງຊາດ (NSEDP).

ຄົມ ແຫ່ງຊາດ 5 ປີ ຄັ້ງທີ VI (NSEDP 2006-2010) ແມ່ນແນໃສ່ຍົກລະດັບຊີວິດການເປັນຢູ່ຂອງປະຊາຊົນທົ່ວໄປ ແລະ ເຮັດໃຫ້ຂະບວນການພັດທະນາແຜ່ກະຈາຍອອກໄປສູ່ທຸກຂົງເຂດ ແລະ ທົ່ວເຖິງປະຊາຊົນບັນດາເຜົ່າທຸກຖ້ວນ ໜ້າ. ເພື່ອບັນລຸເປົ້າໝາຍດັ່ງກ່າວນີ້, ລັດຖະບານລາວ ໄດ້ເພີ່ມທະວີການລົງທຶນ ເຂົ້າໃສ່ການສ້າງທຶນມະນຸດ (ການສຶກສາ ແລະ ສາທາລະນະສຸກ), ກະສິກຳ ແລະ ພື້ນຖານໂຄງລ່າງ[3]. ນອກຈາກເປົ້າໝາຍຂອງກອງປະ ຊຸມໃຫຍ່ຂອງພັກ ຄັ້ງທີ VIII ແລ້ວ ສປປ ລາວ ຍັງມີພັນທະໃນການບັນລຸບັນດາເປົ້າໝາຍສະຫັດສະວັດ. ຍ້ອນແນວນັ້ນ, ຈຶ່ງເຊື່ອໝັ້ນວ່າໃນໄລຍະທ້າຍຂອງແຜນ 5 ປີ ຄັ້ງທີ VI ແລະ ແຜນ 5 ປີ ຄັ້ງທີ VII ລັດຖະບານຈະໃຫ້ຄວາມສຳຄັນຕໍ່ຍຸດທະສາດສົ່ງເສີມການສ້າງວຽກເຮັດງານທຳທີ່ມີປະສິດທິພາບ ແລະ ມີຄ່າຕອບແທນດີໃຫ້ຂະຫຍາຍໃນຂອບເຂດກວ້າງຊຶ່ງສ່ອງແສງໃຫ້ເຫັນສະພາບຕົວຈິງຂອງສະພາບແຮງງານ ແລະ ວິຖີການດຳລົງຊີວິດໃນປະເທດ.

## ເປົ້າໝາຍຂອງບົດລາຍງານ

ບົດລາຍງານສະບັບນີ້ ມີຈຸດປະສົງໃນການສະໜອງຂໍ້ສະເໜີແນະ ແລະ ທິດທາງ ເພື່ອນຳໄປແກ້ໄຂບັນຫາກ່ຽວກັບວຽກເຮັດງານທຳ ແລະ ວິຖີການດຳລົງຊີວິດຂອງປະຊາຊົນລາວ ທັງຍິງ ແລະ ຊາຍ:

**I. ວຽກເຮັດງານທຳ ແລະ ວິຖີການດຳລົງຊີວິດ: ສາຍພົວພັນກັບການຂະຫຍາຍໂຕຂອງເສດຖະກິດ**

1. ແນວໂນ້ມ ແລະ ຮູບແບບໃນມາດຕະຖານຊີວິດການເປັນຢູ່ຂອງປະຊາຊົນ, ການເຕີບໂຕດ້ານເສດຖະກິດ, ທຶນມະນຸດ ແລະ ການພັດທະນາມະນຸດໃນແຕ່ລະແຂວງເປັນຄືແນວໃດ? ວຽກເຮັດງານທຳ, ຄວາມທຸກຍາກ, ການພັດທະນາມະນຸດ ແລະ ໂຄງປະກອບການຂະຫຍາຍໂຕຂອງເສດຖະກິດມີການພົວພັນກັນບໍ່?

2. ໂຄງສ້າງຂອງກຳລັງແຮງງານເປັນຄືແນວໃດ? ກິດຈະກຳເສດຖະກິດປະເພດໃດທີ່ສາມາດຂະຫຍາຍວຽກ ເຮັດງານທຳທັງທາງດ້ານປະລິມານ ແລະ ຄຸນນະພາບ ແລະ ການຂະຫຍາຍນັ້ນຄວນເປັນໄປຄືແນວໃດ?

**II. ຮູບແບບການທຳມາຫາກິນຂອງປະຊາຊົນ ທັງຍິງ ແລະ ຊາຍໃນເຂດຊົນນະບົດ**

3. ຮູບແບບຂອງວຽກ, ໄລຍະເວລາທີ່ບໍ່ໄດ້ເຮັດວຽກ ແລະ ສະຖານະພາບຂອງການທຳມາຫາກິນເປັນຄືແນວໃດ? ບັນຫາຕົ້ນຕໍທີ່ຄວນເອົາໃຈໃສ່ເພື່ອປັບປຸງຊີວິດການເປັນຢູ່ ແລະ ເພີ່ມຄຸນນະພາບຂອງວຽກງານມີຫຍັງແດ່?

4. ລາຍຮັບ, ມາດຕະຖານການດຳລົງຊີວິດ, ການເຂົ້າເຖິງຊັບພະຍາກອນຕ່າງໆ (ລວມເຖິງທີ່ດິນ, ປ່າໄມ້ ແລະ ແຫຼ່ງນ້ຳ) ແລະ ສະພາບຂອງທຶນມະນຸດເປັນຄືແນວໃດ ແລະ ບັນຫາສຳຄັນໃດຄວນເອົາໃຈໃສ່ເພື່ອວາງນະໂຍບາຍ[4].

**III. ລັກສະນະ ແລະ ຄຸນນະພາບວຽກທີ່ບໍ່ເປັນທາງການໃນເຂດຕົວເມືອງ**

5. ສະພາບວຽກເຮັດງານທຳ ກໍ່ຄືການຈ້າງງານ ແລະ ລາຍຮັບຂອງປະຊາຊົນທີ່ເຮັດວຽກໃນຂະແໜງວຽກທີ່ມີລາຍຮັບຕ່ຳໃນເຂດຕົວເມືອງເປັນຄືແນວໃດ?

6. ມາດຕະຖານຂອງວຽກ, ຄວາມໝັ້ນຄົງຂອງອາຊີບ ແລະ ການປ່ຽນວຽກເຮັດເປັນຄືແນວໃດ? ວຽກງານໃດທີ່ຕ້ອງການຄວາມຊ່ວຍເຫຼືອ?

**IV. ແຮງງານລາວທີ່ໄປເຮັດວຽກຢູ່ຕ່າງປະເທດ ແລະ ການເຕົ້າໂຮມແຮງງານກັບຄືນມາເຮັດວຽກໃນປະເທດ**

7. ຄຳຖາມຕົ້ນຕໍ:
   - ກ. ຈຳນວນແຮງງານລາວທີ່ເຮັດວຽກຢູ່ຕ່າງປະເທດ ໂດຍສະເພາະໃນປະເທດໄທ ມີຫຼາຍປານໃດ?
   - ຂ. ເຮັດແນວໃດຂັ້ນຕອນການອອກໄປເຮັດວຽກຢູ່ຕ່າງປະເທດຈະມີຄວາມສະດວກ, ໂປ່ງໃສ ແລະ ເອື້ອອຳນວຍຫຼາຍກວ່ານີ້?
   - ຄ. ມີຂັ້ນຕອນອັນໃດແດ່ທີ່ສາມາດເຮັດໃຫ້ການໂອນເງິນກັບບ້ານ ແລະ ການກັບເຂົ້າມາເຮັດວຽກໃນປະເທດງ່າຍຂຶ້ນ?

**V. ທຶນມະນຸດ, ວຽກເຮັດງານທຳ ແລະ ຊ່ອງທາງໄປສູ່ການພັດທະນາມະນຸດທີ່ດີກວ່າເກົ່າ**

8. ຄຳຖາມຕົ້ນຕໍ:
   - ກ. ສະຖານະພາບການສຶກສາຊັ້ນປະຖົມ ແລະ ການຝຶກອົບຮົມເຕັກນິກ ແລະ ວິຊາຊີບ ທີ່ເປັນອົງປະກອບສຳຄັນໃນການຍົກຄຸນນະພາບຂອງວຽກໃນຂະແໜງນອກກະສິກຳ ແລະ ໃນກະສິກຳ ເປັນຄືແນວໃດ?
   - ຂ. ມີຂັ້ນຕອນໃດແດ່ທີ່ຕ້ອງປະຕິບັດ ເພື່ອເພີ່ມໂອກາດໃນການມີວຽກເຮັດງານທຳ, ການອຳນວຍ ແລະ ການສ້າງສ້າງຄວາມເຂັ້ມແຂງໃຫ້ແກ່ແຮງງານ?

ບົດບາດຍິງຊາຍ, ບັນຫາສິ່ງແວດລ້ອມ ແລະ ບັນຫາຊົນເຜົ່າແມ່ນເລື່ອງທີ່ໄດ້ກ່າວເຖິງທົ່ວໄປໃນບົດລາຍງານ.

## ວິທີການ

### ການວິໄຈຂໍ້ມູນ ແມ່ນໄດ້ອີງໃສ່ຜົນການສຶກສາວິໄຈ ແລະ ຂໍ້ມູນທີ່ມີຢູ່ແລ້ວ (ສຳລັບຈຸດປະສົງ 1 ແລະ 2).

ບົດລາຍງານນີ້ໄດ້ນຳໃຊ້ຂໍ້ມູນຂັ້ນສອງ ແລະ ຜົນການສຶກສາວິໄຈຂອງໜ່ວຍງານທີ່ສັງກັດ ໃນລັດຖະບານ, ອົງການຈັດຕັ້ງສາກົນ ແລະ ຂໍ້ມູນຂອງນັກຄົ້ນຄວ້າສ່ວນບຸກຄົນ. ໂດຍສະເພາະກໍ່ແມ່ນການວິໄຈຂໍ້ມູນຈາກການສຳຫຼວດເສດຖະກິດ ປີ 2006 ແລະ ສ່ວນໜຶ່ງກໍ່ແມ່ນຈາກຜົນການສຳຫຼວດພົນລະເມືອງ ປີ 2005 ເພື່ອເຮັດການປະເມີນການສ້າງວຽກເຮັດງານທຳໃນຂະແໜງການ

3 ເບິ່ງເອກະສານທະນາຄານໂລກ (2008). ອັດຕາສ່ວນການໃຊ້ຈ່າຍເຂົ້າໃນການສຶກສາແມ່ນ 22.5% ຂອງລວມຍອດຜະລິດຕະພັນພາຍໃນ ຊຶ່ງຕ່ຳກວ່າລະດັບຂອງປະເທດອື່ນໃນເຂດພາກພື້ນ; ແຕ່ສູງກວ່າລະດັບໃນຊຸມປີ 1990. ບາງວິທີການບຸລິມະສິດລວມມີ ການປັບປຸງການປົກຄອງຂອງລັດ, ຂັ້ນຕອນການເຊື່ອມໂຍງເຂົ້າກັບພາກພື້ນອາຊີອາຄະເນ ແລະ ການເກັບກູ້ລະເບີດ.

4 ສຳລັບຂໍ້ມູນກ່ຽວຂ້ອງສາມາດເບິ່ງໄດ້ຈາກເອກະສານຕ່າງໆຂອງໂຄງການຮ່ວມມືລາວ-ເຢຍລະມັນໃນການສ້າງນະໂຍບາຍທີ່ດິນ [ຕົວຢ່າງ ສຸລິວັນ ແລະ ຄະນະ (2004); ສຸລິວັນ ແລະ ຄະນະ (2005); Schumann ແລະ ຄະນະ (2006); Seidel ແລະ ຄະນະ (2007); ເຫຼົ່າສີວັດທະນາ ແລະ ແກ້ວມະນີວົງ (2007)]. ພ້ອມດຽວກັນນັ້ນ, ກໍ່ຍັງສາມາດເບິ່ງໄດ້ຈາກ Chamberlain (2007), ໜ້າ 13, ແລະ Chamberlain ແລະ ພົມສົມບັດ (2002), ແລະ Ballard (2005).

### ກ່ອງ 1.1: ປະຫວັດຄວາມເປັນມາຂອງລາວ

ປະຫວັດສາດຂອງປະເທດລາວ ສາມາດທີ່ຈະຍົກເອົາເຫດການຄວາມເປັນມາຂຶ້ນມາໃຫ້ເຫັນໄດ້ນັບຕັ້ງແຕ່ສະໄໝສັດຕະວັດທີ 14 ເປັນຕົ້ນມາ ແຕ່ຮູບລັກສະນະຂອງປະເທດທີ່ເປັນຢູ່ໃນປະຈຸບັນນີ້ແມ່ນເລີ່ມມີມາແຕ່ຊຸມປີ 1930. ປະເທດລາວເຮົາໄດ້ປະກາດຕົນເປັນປະເທດສາທາລະນະລັດປະຊາທິປະໄຕປະຊາຊົນລາວ ໃນປີ 1975. ຂະບວນການພັດທະນາໃນປະຈຸບັນ ໄດ້ເລີ່ມມີບາດກ້າວມາຕັ້ງແຕ່ປີ 1986 ໃນເວລາທີ່ລາວເຮົານຳເອົາກົນໄກເສດຖະກິດໃໝ່ເຂົ້າມາໃຊ້ [Evans (2002), Maclear (1980) ແລະ Chanda (1983)]. ປະຊາຊົນລາວໃນປະຈຸບັນ ຍັງຍຶດຖືອາຊີບການຜະລິດກະສິກຳແບບພໍແຕ່ກຸ້ມກິນ ແລະ ດຳເນີນການທຳມາຫາກິນຕິດພັນກັບການນຳໃຊ້ທີ່ດິນ ແລະ ຊັບພະຍາກອນທຳມະຊາດສືບຕໍ່ກັນມາ. ການພັດທະນາ ແລະ ການຂະຫຍາຍຕົວເມືອງຫາກໍ່ປະກົດມີຂຶ້ນໃນໄລຍະ 2 ທົດສະວັດທີ່ຜ່ານມານີ້ ຍົກເວັ້ນ ນະຄອນຫຼວງວຽງຈັນ ສ່ວນເມືອງໄກສອນພົມວິຫານ, ເມືອງຫຼວງພະບາງ ແລະ ປາກເຊ ຍັງມີລັກສະນະຄືເຂດຊົນນະບົດຢູ່. ດັ່ງນັ້ນ, ໃນຂັ້ນຕໍ່ໄປ ຈຶ່ງມີຄວາມຈຳເປັນທີ່ຈະຕ້ອງທົບທວນຄືນດ້ານການຈັດຕັ້ງສັງຄົມ ແລະ ການປົກຄອງຂອງລັດ ໂດຍອີງໃສ່ສະພາບການຕົວຈິງຂອງປະເທດຄືດັ່ງກ່າວ.

**ສັງຄົມລາວ**

ປະເທດລາວເປັນປະເທດທີ່ມີຄວາມຫຼາກຫຼາຍທາງດ້ານຊົນເຜົ່າ ແລະ ພາສາທ້ອງຖິ່ນ ຊຶ່ງທັງໝົດລວມມີ 49 ຊົນເຜົ່າ ທີ່ມີພາສາປາກເວົ້າເປັນຂອງຕົນເອງ. ບັນດາຊົນເຜົ່າເຫຼົ່ານີ້ ໄດ້ຖືກຈັດເປັນ 4 ກຸ່ມຊົນເຜົ່າຕາມໝວດ ພາສາ ເຊັ່ນ ກຸ່ມເຜົ່າລາວ-ໄຕ (ກວມ 64.9% ຂອງພົນລະເມືອງ), ມອນ-ຂະແມ (23.5%), ຈີນ-ຕີເບດ (2.9%) ແລະ ມົ້ງ-ອີວມຽນ (8.9%). ບັນດາກຸ່ມຊົນເຜົ່າເຫຼົ່ານີ້ ຍັງຄົງຮັກສາຮີດເກົ່າຄອງເດີມ ແລະ ນຳໃຊ້ພາສາທ້ອງຖິ່ນຂອງຕົນໃນລະດັບໃດໜຶ່ງ. ເຖິງແມ່ນວ່າ ພາສາທີ່ເປັນທາງການ ແມ່ນພາສາລາວ ແຕ່ກໍ່ບໍ່ໄດ້ມີຂໍ້ຈຳກັດໃນການນຳໃຊ້ພາສາທ້ອງຖິ່ນຂອງປະຊາຊົນບັນດາເຜົ່າແຕ່ຢ່າງໃດ. ເຖິງຢ່າງໃດກໍ່ຕາມ, ພາສາທ້ອງຖິ່ນຕ່າງໆນັ້ນ ຊ້ຳພັດບໍ່ມີພາສາຂຽນເປັນຂອງຕົນເອງ ແລະ ເອກະສານຕ່າງໆທີ່ຂຽນເປັນພາສາທ້ອງຖິ່ນກໍ່ບໍ່ມີ. ດັ່ງນັ້ນ, ຈຶ່ງສ້າງຂໍ້ຈຳກັດໃຫ້ແກ່ປະຊາຊາຊົນ ທີ່ຮູ້ໃຊ້ແຕ່ພາສາທ້ອງຖິ່ນຂອງຕົນ ໃນການປະກອບສ່ວນເຂົ້າໃນເສດຖະກິດທີ່ເນັ້ນໃສ່ຄວາມຮູ້ເປັນຕົ້ນຕໍໃນປະຈຸບັນ. ຄົນລາວສ່ວນໃຫຍ່ນັບຖືສາດສະໜາພຸດ ແຕ່ວ່າປະຊາຊົນບາງສ່ວນ ກໍ່ນັບຖືສາດສະໜາອື່ນ ເຊັ່ນ ສາດສະໜາຜີ (ລວມເຖິງການນັບຖືບັນພະບູລຸດ), ຄຣິດສະຕຽນ, ອິດສະລາມ, ແລະ ສາດສະໜາອື່ນໆ ໂດຍບໍ່ມີການແຊກແຊງ ຫຼື ຂໍ້ຈຳກັດຈາກພາກລັດ ແລະ ບໍ່ມີຂໍ້ຂັດແຍ່ງກັນທາງສາດສະໜາ. ພ້ອມກັນນັ້ນ, ຄວາມແຕກຕ່າງທາງດ້ານຊົນເຜົ່າ ໂດຍທົ່ວໄປແລ້ວ ກໍ່ບໍ່ສະແດງ ອອກໃຫ້ເຫັນ.

ການຈັດຕັ້ງທາງສັງຄົມໃນ ສປປ ລາວ ມີຄວາມແຕກຕ່າງກັນ ຊຶ່ງສາມາດເຫັນໄດ້ຈາກເອກະລັກສະເພາະທາງດ້ານປະຫວັດສາດ, ວັດທະນະທຳ ແລະ ທີ່ຕັ້ງພູມສັນຖານ. ມີອົງການຈັດຕັ້ງທີ່ບໍ່ສັງກັດລັດຖະບານ (NGO) ຈຳນວນໜຶ່ງເທົ່ານັ້ນທີ່ໄດ້ຮັບການສົ່ງເສີມໃນລະດັບຊາດ ຊຶ່ງໜ້າທີ່ຮັບຜິດຊອບສ່ວນໃຫຍ່ຂອງ ອົງການຈັດຕັ້ງດັ່ງກ່າວ ແທນທີ່ຈະແມ່ນອົງການຈັດຕັ້ງນັ້ນໆ ເປັນຜູ້ຈັດຕັ້ງປະຕິບັດຄືກັບ ໃນຫຼາຍປະເທດປະຕິບັດກັນມາ ແຕ່ ໃນລາວ ພັດແມ່ນອົງການຈັດຕັ້ງມະຫາຊົນເປັນຜູ້ນຳໄປຈັດຕັ້ງປະຕິບັດ ເຊັ່ນ: ສະຫະພັນແມ່ຍິງລາວ, ຊາວໜຸ່ມລາວ ແລະ ສະຫະພັນກຳມະບານລາວ ຄຽງຄູ່ກັບ ອົງການພຸດທະສາດສະໜາ ແລະ ອົງການອື່ນໆທີ່ຄ້າຍ ຄືກັນ.

**ສື່ມວນຊົນ**

ປະຊາຊົນລາວ ກໍ່ຄືກັນກັບປະຊາຊາດອື່ນໆໃນບາງປະເທດໃນເຂດພາກພື້ນ ບໍ່ມີຄວາມຊິນເຄີຍໃນການສື່ສານດ້ວຍການຂີດຂຽນ. ຈົນເຖິງປະຈຸບັນ, ການສື່ສານດ້ວຍການເວົ້າ ແລະ ຮູບການສະແດງອອກປະຈັກຕາ (ເຊັ່ນ: ວິທະຍຸ ແລະ ໂທລະພາບ) ຍັງເປັນສິ່ງທີ່ໄດ້ຮັບຄວາມສົນໃຈຫຼາຍກວ່າ. ສ່ວນປຶ້ມອ່ານ, ວາລະສານ ແລະ ໜັງສືພິມ ແມ່ນໄດ້ຮັບຄວາມສົນໃຈໜ້ອຍກວ່າ ເມື່ອທຽບກັບປະເທດເພື່ອນບ້ານ ເຊັ່ນ: ຫວຽດນາມ. ລັດຖະບານ ບໍ່ໄດ້ເກືອດຫ້າມໃນການນຳເຂົ້າສິ່ງພິມຈາກຕ່າງປະເທດ ຫຼື ໂທລະພາບຂອງຕ່າງປະເທດນອກຈາກສື່ ຫຼື ສິ່ງພິມບາງປະເພດທີ່ກະທົບຕໍ່ວັດທະນະທຳຂອງລາວເທົ່ານັ້ນ. ເຖິງຢ່າງໃດກໍ່ຕາມ, ສະພາບການຂາດແຄນປຶ້ມພິມຕ່າງໆ ແລະ ສື່ທີ່ເປັນສິ່ງພິມຕ່າງໆເປັນບັນຫາກົດໜ່ວງ ເຮັດໃຫ້ປະຊາຊົນບໍ່ມີໂອກາດຂຸດຄົ້ນ ເອົາຄວາມສາມາດທາງສະຕິປັນຍາຂອງເຂົາເຈົ້າອອກມາໃຊ້ໃຫ້ເກີດປະໂຫຍດໄດ້. ເຖິງຢ່າງໃດກໍ່ຕາມ, ສະພາບການອັນນີ້ ກໍ່ມີທ່າອ່ຽງຄ່ອຍໆດີຂຶ້ນເທື່ອລະກ້າວ ແລະ ກົດໝາຍສື່ມວນຊົນ ທີ່ສະເໜີຂຶ້ນມາໃໝ່ອາດຊ່ວຍເປີດກວ້າງໃນການສະແດງອອກຄວາມຮູ້ສຶກນຶກຄິດຂອງປວງຊົນໄດ້ຫຼາຍຂຶ້ນ.

**ການຈັດລຳດັບການພັດທະນາ**

ອີງຕາມດັດຊະນີການພັດທະນາມະນຸດ, ປະເທດ ສປປ ລາວ ໄດ້ຈັດຢູ່ໃນອັນດັບທີ 130 ໃນຈຳນວນ 177 ປະເທດ [ສາມາດເບິ່ງລາຍລະອຽດໄດ້ໃນບົດລາຍງານການພັດທະນາມະນຸດ 2007-08 (UNDP 2007a), ຂໍ້ມູນຮອດປີ 2005]. ສະຖານະພາບດັ່ງກ່າວນີ້ ແມ່ນເກີດຂຶ້ນໃນເງື່ອນໄຂທີ່ເສດຖະກິດມີການຂະຫຍາຍໂຕໄວ ແລະ ລາຍຮັບຂອງຊາດສ່ວນໃຫຍ່ແມ່ນໄດ້ມາຈາກ ຂະແໜງການທີ່ມີປະສິດທິຜົນສູງຄືຂະແໜງການທີ່ບໍ່ແມ່ນກະສິກຳ. ເຫດຜົນທີ່ເຮັດໃຫ້ລະດັບການພັດທະນາມະນຸດໃນລາວຍັງຕ່ຳ ສ່ວນໜຶ່ງ ກໍ່ແມ່ນມາຈາກລັກ ສະນະພູມີປະເທດທີ່ກວ້າງໃຫຍ່ ບວກກັບ ຄວາມຫຍຸ້ງຍາກຂອງການຄົມມະນາຄົມຂົນສົ່ງ, ຄວາມຫຼາກຫຼາຍຂອງຊົນເຜົ່າ, ພື້ນຖານໂຄງລ່າງທາງວັດຖຸ ແລະ ສັງຄົມຍັງອ່ອນນ້ອຍ ແລະ ການຂະຫຍາຍ ໂຕຂອງເສດຖະກິດຍັງສົ່ງຜົນປະໂຫຍດຕໍ່ປະຊາຊົນບໍ່ໄດ້ດີ ແລະ ທົ່ວເຖິງເທົ່າທີ່ຄວນ.

**ສິ່ງທ້າທາຍໃນດ້ານວຽກເຮັດງານທຳ**

ການສຳຫຼວດພົນລະເມືອງ ແລະ ທີ່ຢູ່ອາໄສແຫ່ງຊາດໃນປີ 2005 ຊີ້ໃຫ້ເຫັນວ່າ 39% ຂອງພົນລະເມືອງໃນປີນັ້ນ ມີອາຍຸບໍ່ເກີນ 14 ປີ. ໃນໄລຍະແຕ່ນີ້ຮອດປີ 2015 ອີງຕາມອັດຕາການເຕີບໂຕຂອງພົນລະເມືອງໃນຊຸມປີ 1990 ແລະ ໂຄງປະກອບຂອງພົນລະເມືອງ, ຈຳນວນແຮງງານຈະເພີ່ມຂຶ້ນ 50-60 ພັນຄົນຕໍ່ປີ. ດັ່ງນັ້ນ, ຊາວໜຸ່ມເຫຼົ່ານີ້ ຈະຕ້ອງໄດ້ຮັບການສຶກສາ ແລະ ມີວຽກເຮັດງານທຳດີ ແລະ ມີຄວາມຖາວອນ.

ສປປ ລາວ ກຳລັງປະເຊີນໜ້າກັບສິ່ງທ້າທາຍ ໃນການປັບປຸງທັກສະຄວາມຊຳນານງານ ຂອງແຮງງານທີ່ມີຢູ່ໃນປະຈຸບັນ ແລະ ແຮງງານໃໝ່ ແລະ ການເຕົ້າໂຮມເອົາເຂົາເຈົ້າເຂົ້າມາປະກອບສ່ວນເຮັດວຽກຢູ່ໃນຂະແໜງຕົ້ນຕໍຂອງເສດຖະກິດເພື່ອຮັບປະກັນການກະຈາຍຜົນປະໂຫຍດໃຫ້ທົ່ວເຖິງ ແລະ ມີຄວາມຍືນຍົງ.

ນອກກະສິກຳໃນລະດັບລະອຽດທີ່ສຸດທີ່ເຄີຍມີມາ. ພ້ອມກັນນັ້ນ, ກໍ່ຍັງໄດ້ພະຍາຍາມສຶກສາວິໄຈ, ໄຈ້ແຍກ ແລະ ປຽບທຽບຂໍ້ມູນໃນລະດັບພາກ ແລະ ລະຫວ່າງເພດ ເທົ່າທີ່ເປັນໄປໄດ້.

**ນອກຈາກນັ້ນ, ການຄົ້ນຄວ້າວິໄຈ ຍັງອີງໃສ່ຜົນການສຳຫຼວດຕົວແທນຂັ້ນບ້ານ (ສຳລັບຈຸດປະສົງ 3 ແລະ 4)**

ການສຳຫຼວດໄດ້ປະຕິບັດຢູ່ໃນ 20 ບ້ານໃນທົ່ວທຸກພາກເຊັ່ນ: ພາກໃຕ້, ພາກກາງ ແລະ ພາກເໜືອຂອງລາວ. ປະເພດບ້ານໃນກຸ່ມຕົວແທນມີດັ່ງນີ້:

1. ບ້ານພັດທະນາແລ້ວ ແລະ ມີການຜະລິດກະສິກຳເຊື່ອມໂຍງກັບຕະຫຼາດ.

2. ບ້ານມີການປູກພືດເສດຖະກິດ.

3. ບ້ານມີແຮງງານຈຳນວນຫຼາຍອອກໄປເຮັດວຽກຢູ່ປະເທດໄທ.

4. ບ້ານຖືກຮວມກຸ່ມໃໝ່; ການຮວມກຸ່ມບ້ານ ແມ່ນການຮວມເອົາບ້ານນ້ອຍທີ່ຕັ້ງຢູ່ເຂດຫ່າງໄກສອກຫຼີກ.

5. ບ້ານຖືກຈັດສັນໃໝ່; ຍ້ອນຕັ້ງຢູ່ເຂດທີ່ມີໂຄງການກໍ່ສ້າງຂະໜາດໃຫຍ່; ແລະ

6. ບ້ານອື່ນໆທີ່ບໍ່ນອນຢູ່ໃນປະເພດບ້ານທີ່ກ່າວມາຂ້າງເທິງນັ້ນ

ເຖິງວ່າການຈັດບ້ານໃນຮູບລັກສະນະດັ່ງກ່າວນີ້ ອາດບໍ່ສາມາດສ່ອງແສງໃຫ້ເຫັນສະພາບທັງໝົດ ໃນທົ່ວປະເທດໄດ້ກໍ່ຕາມແຕ່ວ່າການຈັດສັນບ້ານຄືແນວນີ້ ເຮັດໃຫ້ສາມາດຫາຂໍ້ສະຫຼຸບໄດ້ຊັດເຈນກ່ຽວກັບຮູບແບບ ແລະ ຍຸດທະສາດການທຳມາຫາກິນ, ການໃຊ້ເວລາຂອງແຮງງານ, ຄວາມຫຼາກຫຼາຍຂອງສາຂາອາຊີບ, ການນຳໃຊ້ທີ່ດິນ ແລະ ຊັບພະຍາກອນອື່ນໆ, ຜະລິດຕະພາບ, ລາຍຮັບ, ຄວາມສ່ຽງ ແລະ ຄວາມບໍ່ແນ່ນອນຂອງກຳລັງແຮງງານໃນບ່ອນຕ່າງໆ[5]. ການສຶກສາວິໄຈໄດ້ນຳໃຊ້ແບບສອບຖາມ 2 ປະເພດ ຄື: ແບບສອບຖາມສຳລັບບ້ານ (ທ້ອງຖິ່ນ) ແລະ ແບບສອບຖາມຄົວເຮືອນ. ການສອບຖາມດ້ານປະລິມານ ແມ່ນໄດ້ສຳພາດຄົວເຮືອນທັງໝົດໃນແຕ່ລະບ້ານ. ຈຳນວນຄົວເຮືອນທັງໝົດ ທີ່ໄດ້ໃຫ້ການຮ່ວມມື ໃນການສະໜອງຂໍ້ມູນມີ 2,043 ຄົວເຮືອນກວມເອົາ 5,430 ຄົນ (ຊາຍ 2,753 ແລະ ຍິງ 2,695). ຄົວເຮືອນເຄິ່ງໜຶ່ງແມ່ນໄດ້ມີການສຳພາດຄືນພາຍຫຼັງ 4 ເດືອນ ຈາກການສຳພາດທຳອິດ ເພື່ອຕິດຕາມການເໜັງຕີງຂອງຮູບແບບການເຮັດວຽກຕາມລະດູການ. ສຸດທ້າຍ, ກໍ່ໄດ້ເລືອກເຮັດການສຶກສາວິໄຈດ້ານຄຸນນະພາບເພື່ອໃຫ້ຂໍ້ມູນເພີ່ມເຕີມແກ່ຂໍ້ມູນດ້ານປະລິມານ.

**ການວິໄຈອີງໃສ່ການສຶກສາຂອງບາງຂະແໜງການ (ຈຸດປະສົງ 5,6 ແລະ 7)**

ສຳລັບຈຸດປະສົງທີ 5 ແລະ 6 ໄດ້ມີການສຳຫຼວດແຮງງານໃນເຂດຕົວເມືອງຈຳນວນ 800 ຄົນ ລວມທັງແຮງງານທີ່ປະກອບອາຊີບອິດສະຫຼະ ແລະ ແຮງງານຮັບຈ້າງທົ່ວໄປໃນ 4 ຕົວເມືອງ (ນະຄອນຫຼວງວຽງຈັນ, ເມືອງຫຼວງພະບາງ, ໄກສອນພົມວິຫານ ແລະ ປາກເຊ) ເພື່ອປະເມີນການຊອກວຽກເຮັດງານທຳ, ສະພາບການເຮັດວຽກງານ, ລາຍຮັບ, ການປະກັນສັງຄົມ, ການເຄື່ອນຍ້າຍວຽກ ແລະ ສະພາບການຈ້າງງານ. ພ້ອມກັນນັ້ນ ກໍ່ຍັງໄດ້ເກັບກຳຂໍ້ມູນທາງດ້ານປະລິມານນຳ. ສຳລັບຈຸດປະສົງທີ 7, ແມ່ນໄດ້ເກັບກຳຂໍ້ມູນພາກສະໜາມໃນ 6 ບ້ານ ຂອງ 3 ແຂວງ ໂດຍໃຊ້ວິທີປະເມີນແບບຄຸນນະພາບ ແລະ ໄດ້ທົບທວນຄືນບັນດາຂໍ້ມູນ, ເອກະສານຄົ້ນຄວ້າ ແລະ ຂໍ້ມູນອື່ນໆຈາກຜູ້ໃຫ້ຂໍ້ມູນທີ່ສຳຄັນ, ຜູ້ວາງນະໂຍບາຍ, ນັກວິໄຈ ແລະ ອົງການຈັດຕັ້ງສາກົນຕ່າງໆທີ່ເຮັດວຽກກ່ຽວກັບແຮງງານເຄື່ອນຍ້າຍເພື່ອຫາຂໍ້ມູນປະກອບໃຫ້ແກ່ການວິໄຈ.

ຈຸດປະສົງທີ 8 ແມ່ນອີງໃສ່ຂໍ້ມູນ, ບົດລາຍງານທີ່ມີຢູ່ແລ້ວ ແລະ ການສຳພາດນຳພາກລັດຖະບານ ແລະ ພະ,ນັກງານລັດຖະກອນ ແລະ ໄດ້ດຳເນີນການສຶກສາໃນສະຖາບັນເຕັກນິກ ແລະ ວິຊາຊີບທັງໝົດ 7 ແຫ່ງ.

5 ການຈັດປະເພດບ້ານແມ່ນອີງໃສ່ການປຶກສາຫາລືນຳພະນັກງານອາວຸໂສຂອງພາກລັດໃນເຂດນະຄອນຫຼວງວຽງຈັນ ແລະ ຕ່າງແຂວງ. ການຈັດສັນທີ່ຢູ່ອາໄສ ແລະ ຈັດບ້ານໃໝ່ເປັນເລື່ອງທີ່ໜ້າເປັນຫວ່ງເປັນໄຍຫຼາຍ. ດັ່ງນັ້ນ, ບ້ານທີ່ຖືກກະທົບຈາກມາດຕະ ການດັ່ງກ່າວຈຶ່ງນອນຢູ່ໃນກຸ່ມບ້ານຕົວແທນ.

## ເອກະສານຊ້ອນທ້າຍ 1.1:
# ການພັດທະນາມະນຸດ ແລະ ການສ້າງວຽກເຮັດງານທຳ

**ການພັດທະນາມະນຸດແມ່ນຫຍັງ?**
ການພັດທະນາທີ່ແທ້ຈິງ ແມ່ນການຍົກລະດັບຊີວິດການເປັນຢູ່ຂອງປະຊາຊົນ. ທັດສະນະດັ່ງກ່າວ ເປັນທີ່ຮັບຮູ້ກັນໃນວົງກວ້າງຊຶ່ງຢ່າງໜ້ອຍສຸດກໍ່ແມ່ນຕັ້ງແຕ່ປີ 1990 ພາຍຫຼັງທີ່ ອົງການສະຫະປະຊາຊາດເພື່ອການພັດທະນາ (UNDP) ໄດ້ເຜີຍແຜ່ບົດລາຍງານການພັດທະນາມະນຸດສະບັບທຳອິດ. ການພັດທະນາມະນຸດ ຕ້ອງຖືເອົາຄົນ (ຊຶ່ງບໍ່ແມ່ນສິ່ງຂອງ) ເປັນເປົ້າໝາຍສຸດທ້າຍຂອງການພັດທະນາ. ຄວາມສາມາດຂອງຄົນຕ້ອງເພີ່ມຂຶ້ນເພື່ອຈະຊ່ວຍໃຫ້ເຂົາເຈົ້າມີທາງເລືອກຫຼາຍຂຶ້ນ ແລະ ມີຄວາມເປັນອິດສະຫຼະໃນການເລືອກປະຕິບັດ. ດັ່ງທີ່ທ່ານ ອາມາເທຍເຊັນ ໄດ້ກ່າວໄວ້ວ່າ 'ຄວາມຢູ່ດີກິນດີຂອງຄົນ ແມ່ນຄວາມສາມາດໃນການເຮັດສິ່ງໃດໜຶ່ງ ແລະ ຄວາມສາມາດທີ່ຈະເປັນໃນສິ່ງໃດໜຶ່ງ' ຊຶ່ງມີຄວາມໝາຍວ່າ ຄວາມອາດສາມາດ ແລະ ກາລະໂອກາດນັ້ນ ເປັນສິ່ງທີ່ມີຄວາມສຳຄັນຢ່າງຍິ່ງ. ເປົ້າໝາຍ ແລະ ວິທີການໃນການພັດທະນາມະນຸດ ກໍ່ປ່ຽນແປງໄປຕາມກາລະ ແລະ ໂອກາດ. ດັ່ງນັ້ນ, ການພັດທະນາມະນຸດ ຕ້ອງພິຈາລະນາຕາມ ໄລຍະເວລາທີ່ເໝາະສົມ. ພ້ອມກັນນັ້ນ, ກໍ່ບໍ່ຄວນເຂົ້າໃຈ ຫຼື ຖືເອົາຮູບແບບການພັດທະນາມະນຸດແບບຕາຍໂຕ ນອກຈາກວ່າ ໃຫ້ຖືເອົາຄົນເປັນຈຸດໃຈກາງຂອງການພັດທະນາ. [ແຫຼ່ງຂໍ້ມູນ: ບົດລາຍງານການພັດທະນາມະນຸດຂອງໂລກ (ໃນຫຼາຍໆປີ), ແລະ FukudaParr ແລະ Shiva Kumar (2004), ພາກທີ 1].

**ການພັດທະນາມະນຸດ ແລະ ການສ້າງວຽກເຮັດງານທຳ**
ຮູບສະແດງ A1.1 ຊີ້ໃຫ້ເຫັນວ່າ ການຈ້າງງານທີ່ມີປະສິດທິຜົນ ແລະ ມີຄ່າຕອບແທນເໝາະສົມ ແມ່ນສາຍພົວພັນສຳຄັນ ລະຫວ່າງ ການຂະຫຍາຍໂຕຂອງເສດຖະກິດ ແລະ ມາດຕະຖານການດຳລົງຊີວິດຂອງຄົນ. ການຈ້າງງານໃນຂະແໜງເສດຖະກິດຕົ້ນຕໍ ມີການສ້າງ ແລະ ກະຈາຍລາຍຮັບໃນວົງກວ້າງ. ດັ່ງນັ້ນ, ຈຶ່ງຖືເປັນເຄື່ອງມືໃນການຫຼຸດຜ່ອນຄວາມທຸກຍາກ ຊຶ່ງເປັນເລື່ອງທີ່ຖືກຍອມຮັບ ໃນກອງປະຊຸມສຸດຍອດຂອງໂລກ ວ່າດ້ວຍ ການພັດທະນາສັງຄົມ ທີ່ເມືອງໂກເປັນຮາເກັນ ໃນປີ 1995 [ລາຍລະອຽດສາມາດເບິ່ງໄດ້ຈາກ Osmani (2002), Osmani (2004) ແລະ UNDP (2007b)].

**ຮູບສະແດງ A1.1: ການສ້າງວຽກເຮັດງານທຳ ແລະ ການພັດທະນາມະນຸດ – ແຜນວາດລວມ**



# ບົດທີ 2:

## ການພັດທະນາມະນຸດ: ການຕີລາຄາສະພາບ ແລະ ລະດັບໂດຍການນຳໃຊ້ຕົວຊີ້ບອກ



ບົດທີ 2:

# ການພັດທະນາມະນຸດ: ການຕີລາຄາສະພາບ ແລະ ລະດັບ ໂດຍການນຳໃຊ້ຕົວຊີ້ບອກ

ເວົ້າໄປເລື້ອຍໆ [ເວົ້າຄຳເກົ່າ] ເວົ້າແລ້ວເວົ້າອີກ... ມື້ໜຶ່ງເຂົາເຈົ້າອາດຈະຮັບຟັງ

**Mahbub ul Haq, ສະຖາປະນິກ ແລະ ຜູ້ສະໜັບສະໜູນການພັດທະນາມະນຸດ**

## ສະພາບລວມ

ເກືອບ 2 ທົດສະຫວັດມາແລ້ວ ທີ່ເສດຖະກິດຂອງລາວ ໄດ້ມີການຂະຫຍາຍໂຕໃນອັດຕາສູງປະມານ 6-7% ຕໍ່ປີ. ຫວ່າງບໍ່ດົນມານີ້ ສປປ ລາວ ກໍ່ໄດ້ມີການປັບປຸງລຳດັບຂອງຕົນເອງ ທາງດ້ານລະດັບ ດັດຊະນີການພັດທະນາມະນຸດ (HDI) ມາຢູ່ທີ 130 ຈາກ 177 ປະເທດ ໂດຍອີງຕາມ ບົດລາຍງານການພັດທະນາມະນຸດສາກົນ (HDR) ປີ 2007-2008. ແຕ່ເຖິງຢ່າງໃດກໍ່ຕາມ, ປະເທດລາວຍັງຖືກຈັດຢູ່ໃນກຸ່ມປະເທດດ້ອຍພັດທະນາ ຊຶ່ງສ່ວນໜຶ່ງ ແມ່ນມາຈາກລັກສະນະທີ່ຕັ້ງພູມສັນຖານຂອງປະເທດ ແລະ ອີກສ່ວນໜຶ່ງ ກໍ່ມາຈາກຄວາມອາດສາມາດທີ່ຈຳກັດຂອງປະຊາຊົນ ແລະ ສະຖາບັນທີ່ກ້າວໜ້າຕ່າງໆຫາກໍ່ມີໜໍ່ແໜງຂຶ້ນມາ. ສປປ ລາວ ໄດ້ຮ່ວມມືກັບປະເທດຕ່າງໆ ທັງໃນຮູບແບບພະຫຸພາຄີ ແລະ ທະວິພາຄີ ແລະ ທັງໄດ້ເປັນຜູ້ຮັບການຊ່ວຍເຫຼືອ ຈາກສາກົນ. ລັດຖະບານຍັງເຫັນໄດ້ຄວາມສຳຄັນ ແລະ ຈຳເປັນຂອງການສ້າງສະພາບແວດລ້ອມທີ່ເອື້ອອຳນວຍເພີ່ມທະວີການຮ່ວມມືກັບພາຄີຕ່າງໆ ເຊັ່ນອົງການຈັດຕັ້ງມະຫາຊົນ.

ຄາດຄະເນວ່າ ປະມານ 27% ຂອງພົນລະເມືອງ ແມ່ນດຳລົງຊີວິດຢູ່ໃນລະດັບຕ່ຳກວ່າເສັ້ນຄວາມທຸກຍາກແຫ່ງຊາດ (ການຄາດຄະເນໃນປີ 2007-2008). ສັດສ່ວນຄວາມທຸກຍາກມວນລວມ ໄດ້ຫຼຸດລົງໃນທົດສະວັດທີ່ຜ່ານມາ, ແຕ່ມີເຫດຜົນພຽງໜ້ອຍດຽວທີ່ໜ້າເຊື່ອຖືໄດ້ວ່າ ຂະແໜງການທີ່ຂະຫຍາຍໂຕໃນປະຈຸບັນ ໄດ້ປະ ກອບສ່ວນເຂົ້າໃນການຫຼຸດຜ່ອນຄວາມທຸກຍາກ ເນື່ອງຈາກວ່າກຳລັງແຮງງານເກືອບ 80% ແມ່ນເຮັດວຽກຢູ່ຂະແໜງການອື່ນ. ພ້ອມດຽວກັນນັ້ນ, ຄວາມທຸກຍາກຢູ່ແຕ່ລະແຂວງ ກໍ່ໄດ້ຫຼຸດລົງຢ່າງບໍ່ສະໝໍ່າສະເໝີ.

ອັດຕາການຮູ້ໜັງສືຂອງກຸ່ມຄົນທີ່ມີອາຍຸຮອດ 15 ປີ ຫຼື 15 ປີ ຂຶ້ນໄປ ໃນລະຫວ່າງປີ 1995-2005 ແມ່ນມີ ເກືອບເຖິງ 100%. ເຖິງຢ່າງໃດກໍ່ຕາມ, ອັດຕາການເຂົ້າຮຽນຕ່ຳ ແລະ ອັດຕາການປະລະການຮຽນສູງ ຍັງເປັນບັນຫາທີ່ທ້າທາຍ. ໂຮງຮຽນປະຖົມເກືອບເຄິ່ງໜຶ່ງ ຍັງຂາດຄູສອນ ຫຼື ບໍ່ມີອາຄານຮຽນທີ່ໄດ້ມາດຖານ. ພ້ອມດຽວກັນນັ້ນ, ຄູສອນທີ່ເຂົ້າໃຈຫຼາຍກວ່າໜຶ່ງພາສາເວົ້າກໍ່ແມ່ນມີຈຳກັດ. ສະນັ້ນ, ໃນເຂດທ້ອງຖິ່ນທີ່ເດັກນ້ອຍບໍ່ສາມາດເວົ້າພາສາລາວໄດ້ ຈຶ່ງຍັງຂາດຄູສອນຢູ່. ຈຳນວນປີຮຽນສະເລ່ຍຂອງຄົນຜູ້ໜຶ່ງ ມີພຽງປະມານ 4 ປີເທົ່ານັ້ນ. ທຶນມະນຸດຕ່ຳ ກໍ່ແມ່ນເຫດຜົນໜຶ່ງທີ່ເຮັດໃຫ້ຄວາມສາມາດໃນການຈ້າງງານ ຂອງແຮງງານເຮັດວຽກ ຢູ່ນອກຂະແໜງກະສິກຳແບບພໍແຕ່ກຸ້ມຕົນເອງມີຕ່ຳ. ນອກຈາກນີ້ ກໍ່ຍັງມີຄວາມຕ້ອງການໃຫ້ມີການປັບປຸງສະຖານະພາບທາງດ້ານສຸຂະພາບ. ໂດຍລວມແລ້ວ, ເຖິງແມ່ນວ່າໃນທົດສະວັດທີ່ຜ່ານມາ ອັດຕາການຕາຍຂອງເດັກແດງໄດ້ຫຼຸດລົງກໍ່ຕາມ, ແຕ່ສິ່ງທີ່ໜ້າເປັນຫ່ວງກໍ່ຍັງກ່ຽວຂ້ອງກັບອັດຕາການຕາຍຂອງເດັກແດງ (IMR) ທີ່ມີເພີ່ມຂຶ້ນຢູ່ໃນບາງແຂວງ. ອັດຕາການຕາຍຂອງແມ່ ກໍ່ຍັງເພີ່ມສູງຫຼາຍກວ່າ 400 ຕໍ່ ເດັກ 100,000 ຄົນທີ່ເກີດ.

ຕົວຊີ້ບອກຂອງການພັດທະນາແຕ່ລະຕົວໃນແຕ່ລະແຂວງ ແມ່ນມີລັກສະນະແຕກຕ່າງກັນ ແລະ ມີການປ່ຽນແປງໄປຕາມແຕ່ລະໄລຍະເວລາ. ບາງແຂວງທີ່ເຄີຍມີອັດຕາຄວາມທຸກຍາກຕ່ຳ ກໍ່ມີເພີ່ມສູງຂຶ້ນ. ບາງແຂວງທີ່ມີລາຍຮັບຕ່ຳ ແຕ່ພັດມີຕົວຊີ້ບອກທາງດ້ານການສຶກສາດີຂຶ້ນ. ໃນບາງແຂວງ, ມີຕົວຊີ້ບອກທາງດ້ານສາທາ ລະນະສຸກຫຼຸດລົງ. ສະນັ້ນ, ການຕິດຕາມບັນດາຕົວຊີ້ບອກຕ່າງໆໃນເວລາດຽວກັນຈຶ່ງເປັນສິ່ງທີ່ຈຳເປັນ. ໂດຍລວມແລ້ວ, ແຂວງອັດຕະປື, ເຊກອງ, ສາລະວັນ, ຜົ້ງສາລີ, ອຸດົມໄຊ ແລະ ຫົວພັນ ແມ່ນນອນຢູ່ໃນແຂວງທີ່ມີການພັດທະນາມະນຸດຕ່ຳທີ່ສຸດ, ສ່ວນນະຄອນຫຼວງວຽງຈັນ ແລະ ແຂວງວຽງຈັນ ແມ່ນແຂວງທີ່ມີລະດັບພັດທະນາມະນຸດສູງສຸດ.

ໃນອະນາຄົດ, ມັນຮຽກຮ້ອງໃຫ້ມີການປົກປ້ອງຜົນປະໂຫຍດຂອງຜູ້ຄອບຄອງທີ່ດິນ ເມື່ອມີການສ້າງໂຄງການຂຸດຄົ້ນບໍ່ແຮ່ ຫຼື ໂຄງການທີ່ຕ້ອງໄດ້ນຳໃຊ້ທີ່ດິນໃນລັກສະນະດຽວກັນ, ພ້ອມທັງຮຽກຮ້ອງໃຫ້ມີການຕິດຕາມ ກວດກາມາດຕະຖານການດຳລົງຊີວິດ, ຜົນສຳເລັດດ້ານສຶກສາ ແລະ ການປັບປຸງໂອກາດການເຂົ້າເຖິງນ້ຳດື່ມສະອາດເປັນຕົ້ນ.

## ຈຸດປະສົງ

ການຂະຫຍາຍໂຕຂອງເສດຖະກິດໃນທຸກດ້ານ ແລະ ມີຄວາມຍືນຍົງ ສົ່ງຜົນໃຫ້ເກີດການສ້າງວຽກເຮັດງານທຳທີ່ມີຄຸນນະພາບສູງ ແລະ ດີຂຶ້ນ ແລະ ມີການກະຈາຍລາຍໄດ້ແບບເທົ່າທຽມ. ເຖິງຢ່າງໃດກໍ່ຕາມ, ສິ່ງນີ້ໄດ້ຮຽກຮ້ອງໃຫ້ມີຄວາມພະຍາຍາມແບບຕໍ່ເນື່ອງເພື່ອໃຫ້ປະເທດສາມາດຮັກສາອັດຕາການຂະຫຍາຍໂຕໃນລະດັບນີ້ຕໍ່ໄປ. ສະນັ້ນ, ຄວນມີການຕິດຕາມກວດກາຢ່າງເປັນປົກກະຕິ ໂດຍສະເພາະບັນດາຕົວປ່ຽນສຳຄັນທີ່ກ່ຽວພັນກັບສະຫວັດດີພາບຂອງມະນຸດ ໂດຍຜ່ານມຸມມອງຂອງ ການພັດທະນາມະນຸດ. ຂັ້ນຕອນການຕິດຕາມກວດກາລວມມີການຄຳນວນຕົວປ່ຽນເດີມຊ້ຳກັນຫຼາຍໆຄັ້ງ ຫຼື ການຄຳນວນບັນດາຕົວປ່ຽນອັນໃໝ່, ແລະ ປຽບທຽບຜົນຂອງການຄຳນວນດັ່ງກ່າວໃນຫຼາຍໆດ້ານ ບໍ່ວ່າຈະເປັນທາງດ້ານຂະໜາດ ແລະ ເວລາ. ພ້ອມດຽວກັນນັ້ນ, ແນວຄວາມຄິດການພັດທະນາມະນຸດ ແມ່ນກວມເຖິງການສ້າງກຸ່ມຕົວຊີ້ບອກ ເພື່ອປະເມີນຄວາມຄືບໜ້າ ແລະ ບັນຫາຄົງຄ້າງ. ສຸດທ້າຍ, ແນວຄວາມຄິດດັ່ງກ່າວ ຍັງຮຽກຮ້ອງໃຫ້ມີການຊອກຫາສິ່ງທ້າທາຍໃໝ່ໆ ເພື່ອຍົກລະດັບການພັດທະນາມະນຸດ.

ສປປ ລາວ ມີຖານຂໍ້ມູນຍັງບໍ່ທັນຄົບຖ້ວນ ເພື່ອວັດແທກ ແລະ ປະເມີນດ້ານຕ່າງໆຂອງການພັດທະນາມະນຸດເມື່ອປຽບທຽບກັບບັນດາປະເທດອື່ນໆຢູ່ໃນອາຊີ. ເຖິງຢ່າງໃດກໍ່ຕາມ, ຍັງພໍມີບາງຂໍ້ມູນທີ່ມີປະໂຫຍດໃນການນຳໃຊ້ ແລະ ອະທິບາຍຂໍ້ມູນດັ່ງກ່າວເທົ່າທີ່ຈະເຮັດໄດ້.ຂໍ້ມູນເຫຼົ່ານັ້ນໄດ້ແບ່ງ ແລະ ຈັດກຸ່ມໄປຕາມແຂວງ, ເພດ ແລະ ຊົນເຜົ່າ ເພື່ອຮັບໃຊ້ເຂົ້າໃນການສຶກສາວິໄຈຄັ້ງນີ້.

## ຜົນການດຳເນີນງານດ້ານການພັດທະນາມະນຸດໂດຍອີງໃສ່ແຕ່ລະຕົວຊີ້ບອກ

### ບາງບັນຫາຂອງການບໍລິຫານຄຸ້ມຄອງເສດຖະກິດ

#### ການບໍລິຫານຄຸ້ມຄອງ ທີ່ດິນ ທີ່ດີສາມາດສົ່ງເສີມການດຳລົງຊີວິດ

ໃນພາກນີ້ ຈະໄດ້ນຳສະເໜີ ກ່ຽວກັບ ທີ່ດິນກະສິກຳ ຊຶ່ງແມ່ນບັນຫາສຳຄັນທີ່ສຸດທີ່ກ່ຽວຂ້ອງກັບການດຳລົງຊີ ວິດ ແລະ ການມີວຽກເຮັດງານທຳຂອງປະຊາຊົນ. ທີ່ດິນສ່ວນໃຫຍ່ຢູ່ລາວເຮົາ ຍັງບໍ່ໄດ້ຮັບການສຳຫຼວດ ແລະມີພຽງແຜນທີ່ດິນຈຳນວນໜ້ອຍໜຶ່ງເທົ່ານັ້ນ ທີ່ໄດ້ຮັບການສ້າງຂຶ້ນ[6]. ດັ່ງນັ້ນ, ຊາວກະສິກອນສ່ວນໃຫຍ່ (ຫຼື ຜູ້ ມີສິດນຳໃຊ້ທີ່ດິນອື່ນໆ) ບໍ່ມີເອກະສານຖືກຕ້ອງເພື່ອອ້າງກຳມະສິດນຳໃຊ້ທີ່ດິນຂອງເຂົາເຈົ້າ. ຊາວກະສິກອນດຳເນີນການຜະລິດໂດຍອີງໃສ່ຄວາມເຂົ້າໃຈ ເຊິ່ງກັນ ແລະ ກັນ ຊຶ່ງສ່ວນໃຫຍ່ ແມ່ນຜ່ານການໂອ້ລົມກັນແບບປາກຕໍ່ປາກ ລະຫວ່າງ ເຂົາເຈົ້າເອງກັບນາຍບ້ານ ຫຼື ເຈົ້າເມືອງເທົ່ານັ້ນ. ເຖິງຢ່າງໃດກໍ່ຕາມ, ການສັງເກດຈາກການລົງພາກສະໜາມ 2 ຄັ້ງ ໄດ້ຊີ້ໃຫ້ເຫັນບາງບັນຫາທີ່ມາຈາກຄວາມບໍ່ໝັ້ນຄົງຂອງການຄອບຄອງທີ່ດິນຄື:

**ພາກນີ້ຈະລົງເລິກບາງບັນຫາຄື:**

1. ທົບທວນຄືນສະພາບຂອງການບໍລິຫານຄຸ້ມຄອງເສດຖະກິດຂອງລັດ,
2. ຊີ້ໃຫ້ເຫັນການປັບປຸງມາດຕະຖານການດຳລົງຊີວິດ ແລະ ຂີດຄວາມສາມາດຂອງມະນຸດ, ແລະ
3. ປະເມີນສະພາບການພັດທະນາມະນຸດຢູ່ຂັ້ນແຂວງ ໂດຍອີງໃສ່ບັນດາດັດຊະນີດ້ານການພັດທະນາມະນຸດ.

1. ມີຫຼາຍກໍລະນີທີ່ເຈົ້າໜ້າທີ່ຂັ້ນສູງໄດ້ເວນຄືນທີ່ດິນກະສິກຳຂອງຊາວກະສິກອນ ເພື່ອເອົາໄປນຳໃຊ້ໃນຈຸດ ປະສົງອື່ນ (ຕົວຢ່າງສຳລັບຜູ້ໄດ້ຮັບສຳປະທານລາຍໃຫຍ່). ບັນຫານີ້ ໄດ້ເຮັດໃຫ້ຊາວກະສິກອນ ເສຍຜົນປະໂຫຍດ ເນື່ອງຈາກເຂົາເຈົ້າບໍ່ມີຄວາມຮູ້ຄວາມເຂົ້າໃຈພື້ນຖານທາງດ້ານກົດໝາຍ ທີ່ຈະເຈລະຈາກັບການຕັດສິນໃຈດັ່ງກ່າວ[7].

2. ໃນບາງເຂດ ຊາວກະສິກອນ ໄດ້ເລີ່ມອ້າງກຳມະສິດໃນການເປັນເຈົ້າຂອງທີ່ດິນທີ່ເຂົາໄດ້ນຳໃຊ້ໃນການຜະລິດກະສິກຳແບບເຄື່ອນທີ່. ການອ້າງກຳມະສິດດັ່ງກ່າວ ຍັງບໍ່ທັນເປັນບັນຫາຂັດແຍ່ງກັນເທື່ອ ແຕ່ກໍ່ເລີ່ມປະກົດຂຶ້ນ ແລະ ມີມາໃຫ້ໄດ້ຍິນຢູ່[8].

ຂັ້ນຕອນການຮ່າງດຳລັດວ່າ ດ້ວຍການສຳປະທານທີ່ດິນສະບັບໃໝ່ຂອງລັດຖະບານ ກໍ່ກຳລັງຈະສຳເລັດແລະ ເຊື່ອວ່າສິ່ງນີ້ຈະຊ່ວຍແກ້ໄຂບັນຫາ ກ່ຽວກັບ ຂໍ້ຖົກຖຽງຕ່າງໆທີ່ເກີດຂຶ້ນ ຈາກການທີ່ຊາວກະສິກອນບໍ່ມີເອກະສານຢັ້ງຢືນກຳມະສິດທີ່ດິນ. ໃນເວລາກຳລັງຈັດຕັ້ງປະຕິບັດດຳລັດຢູ່ນັ້ນ, ຕາມຫຼັກການແລ້ວ ການດຳລົງຊີວິດຂອງປະຊາຊົນ ຖືເປັນສິ່ງທີ່ມີຄວາມສຳຄັນກວ່າສິ່ງອື່ນໃດທັງປວງ. ກ່ອນອື່ນໝົດ, ສິດທິໃນການດຳລົງຊີວິດກໍ່ຄືກັນກັບສິດທິໃນການມີຊີວິດຢູ່ ແມ່ນຮາກຖານສຳຄັນອັນໜຶ່ງ ທີ່ໄດ້ກຳນົດໄວ້ໃນ ລັດຖະທຳມະນູນຂອງລາວເຮົາ.

#### ສັນຍາ ວ່າດ້ວຍ ທີ່ດິນອຸດສາຫະກຳ: ສາມາດສ້າງຂຶ້ນບົນພື້ນຖານຄວາມສະເໝີພາບ ແລະ ຄວາມຍືນຍົງໄດ້ບໍ່?

ລັດຖະບານ ໄດ້ໃຫ້ການສຳປະທານທີ່ດິນ ສຳລັບ ການຂຸດຄົ້ນບໍ່ແຮ່, ການປູກຝັງ ແລະ ການຜະລິດພະລັງງານໄຟຟ້າແກ່ບໍລິສັດພາຍໃນ ແລະ ຕ່າງປະເທດ. ໃນປີ 2008, ສະເພາະຂະແໜງການບໍ່ແຮ່ພຽງຂະແໜງດຽວໄດ້ ມີການອະນຸມັດສັນຍາເຖິງ 131 ສະບັບໃຫ້ແກ່ 113 ບໍລິສັດ, ກວມເອົາປະມານ 10% ຂອງເນື້ອທີ່ທົ່ວປະເທດ ຊຶ່ງກວ້າງກວ່າເນື້ອທີ່ນາທັງໝົດພາຍໃນປະເທດ[9]. ເຖິງ

6 Mann ແລະ Rock (2008), ໜ້າ. 5-6

7 ກົດໝາຍທີ່ດິນ ປີ 2003, ເລກທີ 04/ສພ, ລະບຸວ່າ ເອກະສານທີ່ດິນເປັນພຽງແຕ່ເປັນກຳມະສິດພື້ນຖານໃນການນຳໃຊ້ທີ່ດິນເທົ່ານັ້ນ. ການສັງເກດຈາກພາກສະໜາມ: ຢູ່ແຂວງສາລະວັນ, ຊາວນາໄດ້ສູນເສຍທີ່ດິນໃຫ້ແກ່ບໍລິສັດສຳປະທານທີ່ດິນ.

8 ແຫຼ່ງຂໍ້ມູນ: ການສັງເກດຈາກພາກສະໜາມ: ແຂວງ ຫຼວງພະບາງ ແລະ ຫຼວງນ້ຳທາ.

9 ແຫຼ່ງຂໍ້ມູນ: ກົມສົ່ງເສີມການລົງທຶນ, ກະຊວງ ແຜນການ ແລະ ການລົງທຶນ. ຮອດປະຈຸບັນ ຍັງບໍ່ມີການບັນທຶກລາຍງານແບບເປັນລະບົບກ່ຽວກັບການໃຫ້ສຳປະທານທີ່ດິນສຳລັບການປູກຕົ້ນຢາງ, ເຖິງແມ່ນວ່າ ສະຖາບັນຄົ້ນຄວ້າເສດຖະກິດແຫ່ງຊາດ ຈະໄດ້ມີການຄາດຄະເນພື້ນທີ່ເຫຼົ່ານີ້ໄວ້ປະມານ 150-180 ພັນເຮັກຕາກໍ່ຕາມ. ຕາມຄວາມເປັນຈິງແລ້ວທັງສູນກາງ ແລະ ທ້ອງຖິ່ນໄດ້ຢຸດໃຫ້ການສຳປະທານທີ່ດິນແລ້ວ.





ການຫາປາເພື່ອຂາຍສາມາດສ້າງລາຍຮັບເພີ້ມຢ່າງໜຶ່ງ

ຢ່າງໃດກໍ່ຕາມ, ສັນຍາຕ່າງໆເຫຼົ່ານັ້ນ ກໍ່ບໍ່ໄດ້ ສ້າງຜົນປະໂຫຍດໃນທາງດີໃຫ້ແກ່ລາວເຮົາສະເໝີໄປ. ຕົວຢ່າງໜຶ່ງທີ່ສະທ້ອນໃຫ້ເຫັນບັນຫາດັ່ງກ່າວແມ່ນການກຳນົດອັດຕາສັນຍາເຊົ່າທີ່ດິນ ໃນບາງເຂດສຳປະທານປູກໄມ້ ທີ່ມີພຽງແຕ່ 6-10 ໂດລາຕໍ່ເຮັກຕາຕໍ່ປີ ຊຶ່ງເປັນອັດຕາທີ່ຕ່ຳກວ່າມາດຕະຖານຢ່າງຈະແຈ້ງ. ນອກຈາກນີ້, ໃນກໍລະນີຂອງການສົ່ງອອກພະລັງງານໄຟຟ້າໄດ້ມີການກຳນົດໃນສັນຍາໃຫ້ນຳໃຊ້ພາສີໃນອັດຕາເກົ່າຕະຫຼອດໄລຍະເວລາຫຼາຍກວ່າ 15-20 ປີ ຊຶ່ງມັນໄດ້ສ້າງຄວາມເສຍປຽບໃຫ້ແກ່ ສປປ ລາວ. ພ້ອມດຽວກັນນັ້ນ, ອັດຕາການຈ່າຍຄ່າທຳນຽມຊັບພະຍາກອນ ໃນບາງໂຄງການທີ່ຍັງດຳເນີນງານຢູ່ນັ້ນ ແມ່ນໄດ້ຈ່າຍໃນອັດຕາທີ່ຕ່ຳ. ຈຳນວນລາຍຮັບງົບປະມານ ທີ່ໜ້ອຍລົງກວ່າເກົ່າ ສົ່ງຜົນກະທົບຕໍ່ຄວາມອາດສາມາດດ້ານການລົງທຶນໃສ່ການພັດທະນາມະນຸດແລະ ສະຫວັດດີການຂອງປະຊາຊົນ[10].

ການຮ່ວມມືທາງດ້ານເສດຖະກິດກັບປະເທດຄູ່ຄ້າສາກົນຂອງ ສປປ ລາວ ຍັງບໍ່ທັນເຮັດໄດ້ເຕັມຄວາມສາ ມາດເທື່ອ. ສິ່ງດັ່ງກ່າວນີ້ຈະເຫັນໄດ້ຈາກການທີ່ຄູ່ຄ້າພາຍໃນຍັງຂາດຄວາມສາມາດໃນການດຳເນີນທຸລະກິດ ກັບຄູ່ຄ້າສາກົນ ແລະ ບໍ່ສາມາດຍາດແຍ່ງເອົາຜົນປະໂຫຍດ ຫຼື ສ່ວນແບ່ງຂອງມູນຄ່າເພີ່ມເຂົ້າໃນປະເທດໄດ້ຫຼາຍກວ່າ. ຕົວຢ່າງ: ຜູ້ບໍລິຫານງານອາວຸໂສ ແລະ ພະນັກງານທາງດ້ານເຕັກນິກວິຊາການ ຂອງໂຄງການລົງທຶນຂອງຕ່າງປະເທດ ສ່ວນຫຼາຍ ແມ່ນຄົນຕ່າງປະເທດ. ສິ່ງດັ່ງກ່າວນີ້ ກໍ່ຍັງພໍຮັບໄດ້ໃນລະດັບໃດໜຶ່ງຢ່າງ ໜ້ອຍກໍ່ແມ່ນໃນສະພາບປະຈຸບັນ. ເຖິງຢ່າງໃດກໍ່ຕາມ, ສິ່ງທີ່ຍອມຮັບບໍ່ໄດ້ແມ່ນ ພະນັກງານໜຸ່ມນ້ອຍ ແລະ ແຮງງານສີມືລະດັບປານກາງ ແລະ ບໍ່ມີສີມື ກໍ່ຍັງແມ່ນຄົນຕ່າງປະເທດອີກ ຊຶ່ງສິ່ງນີ້ແມ່ນໝາຍເຖິງວ່າ ເຮົາຈະໄດ້ຮັບມູນຄ່າເພີ່ມພາຍໃນ ຫຼື ການຈ້າງງານຄົນລາວພຽງໜ້ອຍດຽວເທົ່ານັ້ນ. ໃນກໍລະນີທີ່ຮ້າຍແຮງທີ່ສຸດ ກໍ່ຄື ແຮງງານຕ່າງປະເທດ ໄດ້ຖືກຈ້າງມາເຮັດວຽກກະສິກຳ ທີ່ບໍ່ຈຳເປັນຕ້ອງນຳໃຊ້ເຄື່ອງຈັກ! ບັນດາຕົວແທນເຫຼົ່ານີ້ ຍັງສ້າງຂໍ້ສົງໄສວ່າ ປະເທດເຮົາ ຄວນເປີດກວ້າງໃຫ້ແກ່ການເຂົ້າມາຂອງ ບັນດາບໍລິສັດຕ່າງປະເທດຢ່າງລະມັດລະວັງກວ່ານີ້ ຫຼື ບໍ່[11].

ການຕັດໄມ້ທຳລາຍປ່າ (ທີ່ມີສາເຫດມາຈາກບັນດາກິດຈະກຳໃນເຂດສຳປະທານ, ຄວາມແອອັດຂອງປະຊາຊົນ, ການຫັນເປັນຕົວເມືອງ, ຄວາມຕ້ອງການໄມ້ ແລະ ອື່ນໆ) ແມ່ນມີຜົນກະທົບບໍ່ດີຕໍ່ປະລິມານນ້ຳຝົນ ແລະ ແຫຼ່ງນ້ຳ. ລັດຖະບານລາວເອງ ກໍ່ເຂົ້າໃຈເຊັ່ນດຽວກັນວ່າ ຢູ່ອ່າງເກັບນ້ຳແມ່ນມີນ້ຳບໍ່ພຽງພໍ ຊຶ່ງເຮັດໃຫ້ການຜະລິດໄຟຟ້າຫຼຸດລົງ[12]. ການລາຍງານພາກສະໜາມ ສະແດງໃຫ້ເຫັນວ່າແມ່ນ້ຳ, ຫ້ວຍ, ສາຍທານຕ່າງໆໃນປະຈຸບັນ ແມ່ນມີປະລິມານນ້ຳໃນຮອບປີ ໜ້ອຍກວ່າເມື່ອປຽບທຽບກັບຫຼາຍປີຜ່ານມາ ຊຶ່ງສົ່ງຜົນກະທົບຕໍ່ການດຳລົງຊີວິດຂອງປະຊາຊົນຢູ່ຕາມຊົນນະບົດ ເນື່ອງຈາກພືດພັນ ແລະ ບັນດາສັດໃນທ້ອງຖິ່ນ ລວມທັງປາຊຶ່ງແມ່ນໜຶ່ງໃນອາຫານທີ່ສຳຄັນຂອງຫຼາຍບ້ານໄດ້ຫຼຸດລົງ (ກ່ອງ2.1).

10 ເບິ່ງລາຍລະອຽດ, Pholsena ແລະ Banomyong (2006), ພາກທີ 4 ຂະແໜງການພະລັງງານ; ສຸລິວັນ ແລະ ຄະນະ (2004); ສຸລິວັນ ແລະ ຄະນະ (2005); Schumann ແລະ ຄະນະ (2006); Seidel ແລະ ຄະນະ (2007); ເຫງົ້າສີວັດທະນາ ແລະ ແກ້ວມະ ນີວົງ (2007); ແລະ Dwyer ກ່ຽວກັບທີ່ດິນ (2007).

11 ສາມາດເບິ່ງໄດ້ຈາກ ບົດລາຍງານການພັດທະນາມະນຸດ ເຫຼັ້ມ 3 ແລະ -Pholsena ແລະ Banomyong (2006).

12 ຄຳເວົ້າດັ່ງກ່າວແມ່ນສ່ວນໜຶ່ງໃນຖະແຫຼງການຂອງ ທ່ານນາຍົກລັດຖະມົນຕີ ກ່ຽວກັບ ການແກ້ໄຂບັນຫາທະນາຄານທີ່ກ່ຽວຂ້ອງກັບການຂະຫຍາຍໂຕຂອງລວມຍອດຜະລິດຕະພັນພາຍໃນ (GDP)--. ເບິ່ງໜັງສືພິມ ວຽງຈັນທາຍມ໌ ສະບັບ ວັນທີ 30 ເມສາ 2008.

**ກ່ອງ 2.1: ຄວາມຄິດເຫັນຂອງຊາວບ້ານກ່ຽວກັບສະພາບປ່າໄມ້ ແລະ ນໍ້າ-ເລືອກສັງເກດການ**

‘ປ່າໄມ້ຖືກທຳລາຍ, ຫ້ວຍນໍ້າລຳເຊຕ່າງໆກໍ່ເຫືອດແຫ້ງໄປພ້ອມໆກັບ ປ່າ ແລະ ປາ ກໍ່ເຊັ່ນດຽວກັນ. ແມ່ນໍ້າ ສາຍສຳຄັນມີນໍ້າຢູ່ໃນລະດັບຕໍ່າທີ່ສຸດ... ຝົນກໍ່ຕົກໜ້ອຍກວ່າປີຜ່ານມາ, ໂດຍສະເພາະ ໃນໄລຍະເດືອນເມສາ ຫາ ເດືອນ ພຶດສະພາ ແມ່ນເກືອບຈະບໍ່ມີນໍ້າເລີຍ. ປະຊາຊົນໃນບ້ານ ຕ້ອງໄດ້ອາບນໍ້າຢູ່ໜອງນໍ້າດຽວກັນກັບງົວ, ຄວາຍ ແລະ ສັດອື່ນໆ’. ບ້ານ ທ່າລີ້, ເມືອງນານ, ແຂວງ ຫຼວງພະບາງ.

‘ໃນໄລຍະສອງສາມປີຜ່ານມາສະພາບດິນຟ້າອາກາດໄດ້ປ່ຽນແປງໄປຫຼາຍ.ອາກາດຮ້ອນຂຶ້ນ,ຝົນຕົກໜ້ອຍລົງແລະອຸນຫະພູມກໍ່ຜິດປົກກະຕິກວ່າເກົ່າ. ພວກເຮົາໄດ້ຍິນມາຈາກໂທລະພາບກ່ຽວກັບ “ການປ່ຽນແປງພູມອາກາດຂອງໂລກ”, ຊຶ່ງຈະນຳໄປສູ່ສະພາບອາກາດທີ່ຜິດປົກກະຕິຫຼາຍຂຶ້ນ. ຂ້ອຍກັງວົນໃຈຫຼາຍ ເລື່ອງ ການປູກຕົ້ນຢາງພາລາ ເພາະວ່າ ຕົ້ນຢາງທີ່ຍັງນ້ອຍ ຈະຕາຍໃນໄລຍະ ເດືອນທັນວາ ຍ້ອນອາກາດເຢັນໂພດ’. ທ່ານ ລໍມີ, ນາຍບ້ານ, ບ້ານລໍມີ, ແຂວງ ຫຼວງນໍ້າທາ.

‘ບັນດາຕົ້ນໄມ້ທັງນ້ອຍ ແລະ ໃຫຍ່ຈຳນວນຫຼວງຫຼາຍ ໄດ້ຖືກຕັດລົງດ້ວຍນໍ້າມືຂອງຄົນຢູ່ພາຍນອກ ແລະ ຄົນຢູ່ໃນບ້ານ ຊຶ່ງປະຈຸບັນໃນລະດູແລ້ງແມ່ນແຫ້ງແລ້ງຫຼາຍ ເນື່ອງຈາກຝົນຕົກບໍ່ຫຼາຍ. ເຄື່ອງປ່າຂອງດົງ (NTFP) ກໍ່ຫຼຸດລົງເຊັ່ນດຽວກັນ... ຈຳພວກເຫັດ ຊຶ່ງເປັນສ່ວນໜຶ່ງຂອງອາຫານປະຈຳຂອງພວກເຮົາມີບໍ່ຫຼາຍຢູ່ໃນປ່າ’. ບ້ານ ຢວງທອງ, ເມືອງແປກ, ແຂວງ ຊຽງຂວາງ.

‘ປະຈຸບັນນີ້ ອາກາດຮ້ອນຂຶ້ນ ເມື່ອທຽບກັບປີຜ່ານມາ ເພາະວ່າ ປ່າໄມ້ຄ່ອຍໆຫຼຸດໜ້ອຍຖອຍລົງ ເນື່ອງຈາກ ການລັກລອບຕັດໄມ້ຂອງຊາວບ້ານ ແລະ ຄົນທີ່ຢູ່ບ່ອນອື່ນ. ໃນ 7-8 ປີຜ່ານມານີ້ ສັງເກດເຫັນໄດ້ຢ່າງຈະແຈ້ງວ່າ ປະລິມານນໍ້າຝົນໄດ້ຫຼຸດລົງ’. ບ້ານ ໜອງໃໝ່, ເມືອງ ຄຳ, ແຂວງ ຊຽງຂວາງ

‘ໃນປະຈຸບັນ ບັນດາພືດພັນ, ສັດສາວາສິ່ງຢູ່ທ້ອງຖິ່ນ ຫຼື ເຄື່ອງປ່າຂອງດົງ ແມ່ນບໍ່ມີຫຼາຍຢູ່ໃນປ່າ...ຕາມຄວາມເປັນຈິງແລ້ວ ກໍ່ແມ່ນຜືນປ່າໄມ້ນັ້ນເອງຖືກສູນເສຍໄປ ໂດຍຖືກປ່ຽນແທນ ດ້ວຍການປູກພືດອຸດສາຫະກຳ. ດຽວນີ້ ແມ່ນບັນຫາໃຫຍ່ສຳລັບພວກເຮົາ ໃນການໄປຫາອາຫານຕາມວິຖີຊີວິດທີ່ພວກເຮົາເຄີຍຍຶດຖືຜ່ານມາ....ໂດຍສະເພາະ ການຊອກຫາກິນຈາກທຳມະຊາດ’. ບ້ານສອງຫ້ອງ, ເມືອງ ເລົ່າງາມ, ແຂວງ ສາລະວັນ

***ແຫຼ່ງຂໍ້ມູນ:*** *ການລົງສຳຫຼວດພາກສະໜາມ, ມັງກອນ-ກຸມພາ 2008*

ໃນຂະນະທີ່ບັນດາກົດໝາຍໄດ້ຮັບການອະນຸມັດເພື່ອປົກປ້ອງປ່າໄມ້ (ເຊັ່ນ ການຫ້າມສົ່ງອອກໄມ້ທ່ອນ, ການລັກລອບຕັດໄມ້ ແລະ ອື່ນໆ.), ແຕ່ການບັງຄັບໃຊ້ກົດໝາຍເຫຼົ່ານັ້ນຍັງບໍ່ເຂັ້ມງວດ ຈຶ່ງເຮັດໃຫ້ເກີດຄວາມເສຍຫາຍຢ່າງຫຼວງຫຼາຍ. ວິທີການໜຶ່ງທີ່ອາດເປັນປະໂຫຍດໃນການປົກປ້ອງປ່າໄມ້ໃນເຂດຊຸມຊົນ ກໍ່ແມ່ນການມອບສິດອຳນາດໃຫ້ແກ່ປະຊາຊົນເອງເປັນຜູ້ຄຸ້ມຄອງ. ພ້ອມດຽວກັນນັ້ນ, ຈະເປັນໄປໄດ້ບໍ່ ຖ້າຈະມີອີກທາງເລືອກໜຶ່ງໃນ ‘ການຮ່ວມກັນຄຸ້ມຄອງ ຊັບສິນສ່ວນລວມ ກໍ່ຄືການຮ່ວມກັນຄຸ້ມຄອງ ປ່າໄມ້’ ຄືດັ່ງທີ່ປະເທດອື່ນ[13] ໄດ້ປະຕິບັດກັນມາ.

## ການຍົກຍ້າຍຖິ່ນຖານ ແລະ ການຈັດກຸ່ມບ້ານ ຄວນຊ່ວຍໃຫ້ຊີວິດການເປັນຢູ່ຂອງປະຊາຊົນດີຂຶ້ນ

ລັດຖະບານໄດ້ເລີ່ມດຳເນີນໂຄງການການຍົກຍ້າຍທີ່ຕັ້ງຂອງບ້ານທີ່ນອນຢູ່ໃນເຂດໂຄງການອຸດສາຫະກຳຂະໜາດໃຫຍ່. ບາງໂຄງການມີການຈັດກຸ່ມບ້ານໃໝ່ ໂດຍລວມເອົາບ້ານນ້ອຍຕ່າງໆທີ່ໂດດດ່ຽວ ແລະ ຕັ້ງຢູ່ເຂດພູດອຍຫ່າງໄກສອກຫຼີກເຂົ້າມາຮວມກັນ ເພື່ອສ້າງໃຫ້ເປັນບ້ານໃຫຍ່ ແລະ ມີປະຊາກອນຫຼາຍພຽງພໍທີ່ຈະສ້າງເງື່ອນໄຂສະດວກໃຫ້ແກ່ການຂະຫຍາຍບໍລິການທາງດ້ານເສດຖະກິດ, ສັງຄົມ ແລະ ບໍລິການຕ່າງໆທີ່ປະຊາຊົນສາມາດຊົມໃຊ້ໄດ້. ເຖິງຢ່າງໃດກໍ່ຕາມ, ຕໍ່ກັບບັນດາໂຄງການເຫຼົ່ານີ້ ແມ່ນຮຽກຮ້ອງໃຫ້ມີການຕິດຕາມ ກວດກາຢ່າງໃກ້ຊິດ ເພື່ອຮັກສາໄວ້ວິຖີການດຳລົງຊີວິດ ແລະ ຄວາມສາມັກຄີພາຍໃນສັງຄົມ. ໂດຍສະເພາະແລ້ວ, ບາງຂົງເຂດທີ່ຍົກຍ້າຍທີ່ຕັ້ງບ້ານໃໝ່ ຍັງຮຽກຮ້ອງໃຫ້ມີການແກ້ໄຂບັນຫາທາງດ້ານຊົນເຜົ່າໃຫ້ມີປະສິດ ທິຜົນຂຶ້ນຕື່ມອີກ. ນອກນັ້ນ, ຄວນມີການກະກຽມທາງດ້ານການແບ່ງປັນທີ່ດິນກະສິກຳກ່ອນທີ່ຈະຍົກຍ້າຍ ຖິ່ນຖານຂອງປະຊາຊົນ. ພ້ອມກັນນັ້ນ, ກໍ່ຄວນມີການປະເມີນສະພາບແຫຼ່ງຊັບພະຍາກອນທຳມະຊາດທີ່ສາມາດຊົມໃຊ້ໄດ້ ໃຫ້ມີຄວາມແນ່ນອນຫຼາຍກວ່ານີ້ ແລະ ຕ້ອງມີການປະເມີນດ້ານອື່ນໆນຳອີກ[14]. ການລົງສຳຫຼວດພາກສະໜາມສອງແຫ່ງໄດ້ສະແດງໃຫ້ເຫັນສະພາບຕົວຈິງ ໃນທ້ອງຖິ່ນ. ຢູ່ທາງພາກເໜືອ, ບາງຄົນທີ່ມາຈາກກຸ່ມຊົນເຜົ່າອາຄາ (ເຜົ່າທີ່ໃຊ້ພາສາຈີນ-ທິເບດ, ເບິ່ງກ່ອງ 1.1) ໄດ້ຍົກຍ້າຍຖິ່ນຖານມາຕັ້ງຢູ່ຮ່ວມກັບບ້ານຂອງເຜົ່າລື້ (ທີ່ໃຊ້ພາສາລາວ-ໄຕ). ອີກກໍລະນີໜຶ່ງ, ປະຊາຊົນທີ່ມາຈາກ ເຜົ່າມົ້ງ, ເຜົ່າຂະມຸ (ທີ່ໃຊ້ພາ ສາມອນ-ຂະແມ) ແລະ ເຜົ່າລາວໄດ້ຖືກຈັດກຸ່ມເປັນບ້ານດຽວກັນ. ການຮວມກັນເປັນບ້ານດຽວ ທີ່ມີປະຊາກອນຫຼາຍຂຶ້ນ ເຮັດໃຫ້ເຄື່ອງປ່າຂອງດົງ ຕໍ່ຫົວຄົນຫຼຸດລົງ. ນອກນັ້ນ, ເນື່ອງຈາກວ່າ ບັນດາກຸ່ມຊົນເຜົ່າຕ່າງໆບໍ່ເຂົ້າໃຈພາສາກັນດີປານໃດ ຈຶ່ງເຮັດໃຫ້ເຂົາເຈົ້າບໍ່ຄ່ອຍໄດ້ໂອ້ລົມກັນຫຼາຍ. ສາຍພົວພັນຂອງເຂົາເຈົ້າ ກໍ່ບໍ່ຄ່ອຍ ກົມກຽວກັນດີ ເນື່ອງຈາກຂາດການສື່ສານທີ່ເປັນອຸປະສັກຕໍ່ການປະນີປະນອມ ແລະ ຕົກລົງກັນ, ເຊັ່ນບັນຫາກ່ຽວກັບການນຳໃຊ້ສິ່ງສາທາລະນຸປະໂພກເປັນຕົ້ນ.

13 http://en.wikipedia.org/wiki/Joint_Forest_Management

14 ເບິ່ງຕົວຢ່າງ, Ducourtieux, Laffort ແລະ Sacklokham (2005), ໜ້າ 499-526; Evrard ແລະ Goudineau (2004), ໜ້າ 937-962; - Baird ແລະ Shoemaker (2005).

**ຮູບສະແດງ 2.1: ອັດຕາສ່ວນຂອງພົນລະເມືອງ ຢູ່ລຸ່ມເສັ້ນຄວາມທຸກຍາກ ຂອງ ສປປ ລາວ, ແບ່ງຕາມພາກ ແລະ ປີ.**




***ແຫຼ່ງຂໍ້ມູນ:*** *ລັດຖະບານ ສປປລາວ (1994); ລັດຖະບານ ສປປລາວ (1999); ລັດຖະບານ ສປປລາວ (2004); ແລະ ການສຳຫຼວດການຊົມໃຊ້ ແລະ ໃຊ້ຈ່າຍຂອງຄົວເຮືອນ (ຮຽບຮຽງໂດຍກົມສະຖິຕິ, ອີງໃສ່ການຄິດໄລ່ຂໍ້ມູນຈາກ ຕົວແທນ 50% ຫຼື ເຄິ່ງໜຶ່ງຂອງຈຳນວນຕົວແທນທັງໝົດຂອງການສຳຫຼວດ)*

ດັ່ງນັ້ນ, ຈຶ່ງຮຽກຮ້ອງໃຫ້ມີການພິຈາລະນາຢ່າງຮອບດ້ານ ກ່ຽວກັບການຈັດຕັ້ງໂຄງການທີ່ກ່ຽວຂ້ອງ ກັບການຍົກຍ້າຍຖິ່ນຖານ ແລະ ການຈັດຕັ້ງກຸ່ມບ້ານໃໝ່.

### ດ້ານອື່ນໆ

ການຂາດຄວາມສາມາດໃນການເພີ່ມລາຍຮັບຂອງ ລັດຖະບານ ໄດ້ສົ່ງຜົນເຮັດໃຫ້ອັດຕາເງິນເດືອນຂອງພາກລັດຢູ່ໃນລະດັບຕໍ່າ, ໝາຍຄວາມວ່າ ລັດຖະບານ ອາດບໍ່ສາມາດດຶງດູດ ແລະ ຮັກສາພະນັກງານຜູ້ທີ່ມີຄວາມ ຮູ້ຄວາມສາມາດສູງໄວ້ໄດ້. ເງິນເດືອນພະນັກງານລັດຕໍ່າ ຍັງແມ່ນສາເຫດທີ່ພາໃຫ້ເກີດມີການສໍ້ລາດບັງຫຼວງ. ພ້ອມດຽວກັນນັ້ນ, ການອອກກົດໝາຍທີ່ຍັງຈຳກັດ ແລະ ການຕັດສິນໃຈທາງດ້ານເສດຖະກິດຂອງອຳນາດການປົກຄອງໃນລະດັບຕ່າງໆທີ່ກ່ຽວຂ້ອງ ທີ່ຂາດຄວາມໂປ່ງໃສ ໄດ້ກາຍເປັນສິ່ງກີດຂວາງໃຫ້ແກ່ການລົງທຶນພາຍໃນ ແລະ ຕ່າງປະເທດ[15].

### *ສະຫຼຸບຫຍໍ້:*

1. *ຍ້ອນວ່າຂະບວນການພັດທະນາຂຶ້ນກັບແຫຼ່ງຊັບພະຍາກອນທຳມະຊາດ, ມັນຈຶ່ງບໍ່ສາມາດຫຼີກຫຼ່ຽງໄດ້ຂໍ້ຂັດແຍ່ງທາງດ້ານຜົນປະໂຫຍດລະຫວ່າງຜູ້ທີ່ກ່ຽວຂ້ອງຄົນເກົ່າ ແລະ ຄົນໃໝ່. ສິ່ງນີ້ໄດ້ຮຽກຮ້ອງໃຫ້ມີການທຳຄວາມເຂົ້າໃຈກັນຢ່າງຄ່ອງແຄ້ວ.*

2. *ຄວາມເປັນຈິງຕ້ອງໄດ້ເລືອກລະຫວ່າງຜົນປະໂຫຍດບາງດ້ານທີ່ສາມາດໄດ້ຮັບ ແລະ ການອະນຸລັກສິ່ງແວດລ້ອມຊຶ່ງຈະໃຫ້ປະໂຫຍດໃນຫຼາຍດ້ານ. ສະນັ້ນ, ຈາກແນວຄວາມຄິດດ້ານການພັດທະນາມະນຸດ ແລ້ວ, ກອບນິຕິກຳ ວ່າດ້ວຍທີ່ດິນ ແລະ ແຫຼ່ງຊັບພະຍາກອນທຳມະຊາດ ຕ້ອງລະບຸເນື້ອໃນກ່ຽວກັບການປົກປັກຮັກສາສິ່ງແວດລ້ອມຢ່າງຈະແຈ້ງ ແລະ ກົດໝາຍດັ່ງກ່າວ ກໍ່ຕ້ອງໄດ້ຮັບການຈັດຕັ້ງປະຕິບັດຢ່າງເຂັ້ມງວດ..*

3. *ໃນຂະນະທີ່ລັດຖະບານ ໄດ້ມີເຈດຈຳນົງທຸ້ມເທເຮື່ອແຮງ ເພື່ອດຳເນີນການກວດກາຄືນກ່ຽວກັບທີ່ດິນ, ປ່າໄມ້ ແລະ ກິດຈະການສຳປະທານບໍ່ແຮ່ ເພື່ອປົກປ້ອງຜົນປະໂຫຍດຂອງປະຊາຊົນບັນດາເຜົ່າ ຜູ້ຫາລ້ຽງຊີບໂດຍອາໄສຊັບພະຍາກອນເຫຼົ່ານີ້, ເຈດຈຳນົງນີ້ ຄວນໄດ້ຮັບການຜັນຂະຫຍາຍ ໃຫ້ກາຍເປັນນະໂຍບາຍທີ່ສາມາດນຳມາຈັດຕັ້ງປະຕິບັດໃຫ້ເກີດຜົນເປັນຈິງໄດ້.*

15 ລາຍຮັບຈາກພາສີຕໍ່ອັດຕາລາຍຮັບຂອງລັດຖະບານທັງໝົດແມ່ນ 78% ໃນປີ 2005-06, ໃນຂະນະທີ່ລາຍຮັບ ທັງໝົດຕໍ່ GDP ແມ່ນ 13.8%. ຖ້າທຽບໃສ່ຂະໜາດຂອງລັດຖະບານເຫັນວ່າ, ອັດຕາເຫຼົ່ານີ້ແມ່ນຍັງໜ້ອຍ. ທ່ານ StuartFox (2007) ໄດ້ປະເມີນການບໍລິຫານຄຸ້ມຄອງຂອງ ລາວ ໂດຍນຳໃຊ້ມາດຖານ 7 ຈຸດ (7 ແມ່ນຈຸດທີ່ດີທີ່ສຸດ). ລາວພົບວ່າ 'ຄວາມຮັບຜິດຊອບ ແລະ ການອອກສຽງທົ່ວໄປ' ແມ່ນ 1.19 ໃນປີ 2005 ແລະ 1.16 ໃນປີ 2007, 'ເສລີພາບຂອງພົນລະເມືອງ' 2.16 ແລະ 2.39, 'ກົດລະບຽບ ທາງດ້ານກົດໝາຍ' 1.63 ແລະ 1.99, ແລະ 'ຕໍ່ຕ້ານການສໍ້ລາດບັງຫຼວງ ແລະ ຄວາມໂປ່ງໃສ' 1.51 ແລະ 1.64, ຢູ່ໃນ 2 ປີ ນີ້.

## ມາດຕະຖານການດຳລົງຊີວິດຂອງປະຊາຊົນໄດ້ຮັບການປັບປຸງໃຫ້ດີຂຶ້ນ, ແຕ່ຄວາມແຕກໂຕນກັນລະຫວ່າງພາກຕ່າງໆກໍ່ຍັງມີຢູ່

ຄວາມທຸກຍາກ ແມ່ນສະພາບກົງກັນຂ້າມກັບການກິນອີ່ມນຸ່ງອຸ່ນ ກໍ່ຄືຄວາມຢູ່ດີກິນດີຂອງຄົນເຮົາ ໂດຍພື້ນຖານແລ້ວ ຄວາມທຸກຍາກ ໝາຍເຖິງການມີອາຫານ ແລະ ປັດໄຈຄວາມຕ້ອງການຂັ້ນພື້ນຖານທີ່ບໍ່ພຽງພໍ. ເວລາທີ່ຄົນເຮົາ ບໍ່ສາມາດຊອກຫາປັດໄຈຈຳເປັນຂັ້ນພື້ນຖານມາໄດ້ຢ່າງພຽງພໍກັບຄວາມຕ້ອງການ ໃນການດຳລົງຊີວິດຂອງຕົນ, ເວລານັ້ນ ເຂົາເຈົ້າຈະຖືວ່າ ທຸກຍາກ. ນອກນັ້ນ, ຄວາມທຸກຍາກ ຍັງກ່ຽວຂ້ອງກັບການບໍ່ມີວຽກເຮັດງານທຳ, ວຽກທີ່ມີລາຍຮັບຕ່ຳ, ຄວາມບໍ່ສະເໝີພາບສູງ, ການແບ່ງແຍກທາງສັງຄົມ ແລະ ອື່ນໆ. ພວກເຮົາໄດ້ຕິດຕາມກວດກາຄວາມທຸກຍາກຢ່າງເປັນລະບົບ ມາຕັ້ງແຕ່ຕົ້ນຊຸມປີ 1990 ໂດຍຜ່ານການສຳຫຼວດຕົວແທນໃນທຸກໆຫ້າປີ ທີ່ຮູ້ຈັກກັນດີໃນນາມ ການສຳຫຼວດການໃຊ້ຈ່າຍ ແລະການຊົມໃຊ້ຂອງຄົວເຮືອນ(LECS)[16]. ມາຮອດປະຈຸບັນນີ້ໄດ້ມີການສຳຫຼວດທັງໝົດ 4 ຄັ້ງ: ໃນປີ1992-93 (ການສຳຫຼວດການໃຊ້ຈ່າຍ ແລະ ການຊົມໃຊ້ຂອງລາວ ຄັ້ງທີ1), 1997-1998 (ການສຳຫຼວດການໃຊ້ຈ່າຍ ແລະ ການຊົມໃຊ້ ຂອງລາວ ຄັ້ງທີ 2), 2002-2003 (ການສຳຫຼວດການໃຊ້ຈ່າຍ ແລະ ການຊົມໃຊ້ຂອງລາວ ຄັ້ງທີ 3) ແລະ 2007-2008 (ການສຳຫຼວດການໃຊ້ຈ່າຍ ແລະ ການຊົມໃຊ້ຂອງລາວ ຄັ້ງທີ 4)[17].

**ຕາຕະລາງ 2.1: ອັດຕາສ່ວນຂອງປະຊາຊົນທີ່ຢູ່ຕ່ຳກວ່າເສັ້ນຄວາມທຸກຍາກ ແລະ ອັດຕາການປ່ຽນແປງ, 1992/1993 – 2002/2003, ເຂດຊົນນະບົດ**

| | % ທຸກຍາກ | | | % ການປ່ຽນແປງຈຳນວນຄົນທຸກຍາກ | | |
|---|---|---|---|---|---|---|
| **ແຂວງ** | **92/93** | **97/98** | **02/03** | **92/93–97/98** | **97/98–02/03** | **92/93–02/03** |
| ນ. ວຽງຈັນ | 52.94 | 11.12 | 20.16 | -65.91 | 25.63 | -57.17 |
| ຜົ້ງສາລີ | 72.02 | 58.38 | 52.66 | -25.28 | 3.18 | -22.90 |
| ຫຼວງນ້ຳທາ | 55.39 | 53.54 | 22.13 | 102.14 | -53.21 | -5.42 |
| ອຸດົມໄຊ | 47.33 | 70.59 | 46.21 | 1.27 | -23.77 | -22.80 |
| ບໍ່ແກ້ວ | 63.64 | 39.96 | 20.62 | 82.49 | -48.42 | -5.87 |
| ຫຼວງພະບາງ | 62.40 | 42.29 | 40.62 | -22.14 | 7.20 | -16.54 |
| ຫົວພັນ | 73.33 | 72.56 | 54.84 | 27.58 | -24.19 | -3.29 |
| ໄຊຍະບູລີ | 14.90 | 18.35 | 23.71 | 133.04 | 21.28 | 182.64 |
| ຊຽງຂວາງ | 71.62 | 43.93 | 46.63 | -28.00 | -5.91 | -32.26 |
| ວຽງຈັນ | 31.93 | 29.03 | 19.85 | 0.31 | -24.71 | -24.48 |
| ບໍລິຄຳໄຊ | 16.81 | 26.99 | 37.03 | 38.78 | 3.48 | 43.61 |
| ຄຳມ່ວນ | 49.76 | 49.27 | 35.91 | 22.15 | -30.40 | -14.98 |
| ສະຫວັນນະເຂດ | 58.25 | 44.38 | 48.02 | -4.72 | 7.36 | 2.29 |
| ສາລະວັນ | 48.00 | 40.30 | 57.11 | 1.79 | 51.72 | 54.45 |
| ເຊກອງ | 66.98 | 52.86 | 44.62 | -22.20 | -8.22 | -28.59 |
| ຈຳປາສັກ | 46.81 | 39.56 | 19.81 | 8.56 | -47.88 | -43.42 |
| ອັດຕະປື | 82.31 | 49.00 | 47.32 | -1.20 | -5.27 | -6.41 |
| ທົ່ວປະເທດລາວ | 51.78 | 42.46 | 37.63 | 1.75 | -11.10 | -9.54 |

***ແຫຼ່ງຂໍ້ມູນ:*** *ກົມສະຖິຕິ, ກະຊວງ ແຜນການ ແລະ ການລົງທຶນ.*

16 ເສັ້ນຄວາມທຸກຍາກແຫ່ງຊາດ ແມ່ນໄດ້ຄິດໄລ່ກ່ຽວກັບໂພຊະນາການພື້ນຖານ. ເພື່ອຢາກໃຫ້ຢູ່ສູງກວ່າເສັ້ນຄວາມທຸກຍາກຜູ້ໃຫຍ່ຜູ້ໜຶ່ງຕ້ອງໄດ້ບໍລິໂພກຈຳນວນ 2,100 ກິໂລແຄລໍລີຕໍ່ມື້. ພ້ອມດຽວກັນນັ້ນ, ລາວຍັງຕ້ອງບໍລິໂພກສິນຄ້າຈຳເປັນທີ່ບໍ່ແມ່ນອາຫານ. ຈຳນວນທີ່ໃຊ້ຈ່າຍຄາດໄວ້ໃນເບື້ອງຕົ້ນແມ່ນ 2,100 ກິໂລກາລໍລີ ແລະ ຫຼັງຈາກນັ້ນ ບວກຕື່ມການໃຊ້ຈ່າຍສຳລັບປະເພດທີ່ບໍ່ແມ່ນອາຫານອີກ 30 % ຂອງລາຍຈ່າຍປະເພດອາຫານ. ລວມທັງສອງຢ່າງນີ້ແມ່ນເສັ້ນຄວາມທຸກຍາກ.

17 GOL (1994), GOL (1999) ແລະ GOL (2004). LECS 4 ຍັງບໍ່ທັນໄດ້ຮັບການພິມເຜີຍແຜ່ເທື່ອ.

ໃນປີ 1992-1993, ພົນລະເມືອງລາວປະມານ 46% ແມ່ນດຳລົງຊີວິດຢູ່ໃນລະດັບຕ່ຳກວ່າເສັ້ນຄວາມທຸກຍາກ. ຕັ້ງແຕ່ນັ້ນມາອັດຕາດັ່ງກ່າວ ໄດ້ຄ່ອຍໆຫຼຸດລົງເທື່ອລະໜ້ອຍ ແລະ ການຄາດຄະເນຈາກບາງພາກ ສ່ວນຂອງຂໍ້ມູນປີ 2007-2008 ໃຫ້ຮູ້ວ່າ ຄວາມທຸກຍາກໃນປະຈຸບັນໄດ້ຫຼຸດລົງມາຢູ່ລະດັບ 27.6% (ຮູບສະແດງ 2.1). ສັງເກດເບິ່ງໃນລະດັບພາກແລ້ວ ເຫັນວ່າອັດຕາສ່ວນຂອງຄອບຄົວທຸກຍາກຢູ່ທາງພາກເໜືອແມ່ນມີຫຼາຍຂຶ້ນ ແລະ ອັດຕາການຫຼຸດຜ່ອນຄວາມທຸກຍາກແມ່ນມີຕ່ຳ. ສ່ວນໃຫຍ່ແລ້ວ ຄວາມທຸກຍາກຢູ່ທາງພາກກາງ ແລະ ພາກໃຕ້ ໄດ້ຫຼຸດຜ່ອນລົງ. ໃນໄລຍະປີ 1992/1993-2007/2008, ຄວາມທຸກຍາກຢູ່ຊົນນະບົດແມ່ນຫຼຸດລົງຈາກ 51.8% ມາເປັນ 31.7% ແລະ ໃນໄລຍະດຽວກັນນັ້ນຄວາມທຸກຍາກຢູ່ຕົວເມືອງກໍ່ຫຼຸດລົງ ຈາກ 26.5% ມາເປັນ 12.4%[18]. ການເຄື່ອນຍ້າຍເຂົ້າສູ່ຕົວເມືອງ ຂອງຄົວເຮືອນທຸກຍາກຈາກເຂດຊົນນະບົດ ອາດເປັນສາເຫດທີ່ເຮັດໃຫ້ການຫຼຸດລົງຂອງຄວາມທຸກຍາກ ຢູ່ເຂດຕົວເມືອງມີຄວາມຊັກຊ້າ ແລະ ຍັງເຮັດໃຫ້ອັດຕາຄວາມທຸກຍາກໃນບາງແຂວງ ໃນໄລຍະປີ 2002/2003-2007/2008 ເພີ່ມຂຶ້ນ ຕົວຢ່າງ ນະຄອນຫຼວງວຽງຈັນເຄີຍມີອັດຕາຄວາມທຸກຍາກຕ່ຳສຸດ, ແຕ່ວ່າໃນທົດສະວັດທີ່ຜ່ານມາພັດມີອັດຕາເພີ່ມຂຶ້ນ, ທັງນີ້ສ່ວນໃຫຍ່ ອາດແມ່ນຍ້ອນການເຄື່ອນຍ້າຍເຂົ້າມາຂອງຄົນທຸກຍາກ[19].

ຄວາມທຸກຍາກໃນເຂດຊົນນະບົດ ມີສູງ ແລະ ມີຫຼາຍກວ່າ ເມື່ອທຽບກັບຄວາມທຸກຍາກໃນເຂດຕົວເມືອງ; ສະນັ້ນບັນຫານີ້ຈຶ່ງກາຍເປັນບັນຫາທີ່ໜ້າເປັນຫ່ວງຫຼາຍ. ໃນປີ 2002-03, 9 ແຂວງໃນຈຳນວນ 17 ແຂວງ ແມ່ນມີອັດຕາສ່ວນຄວາມທຸກຍາກສູງກວ່າລະດັບສະເລ່ຍຂອງປະເທດ[20] ເຊັ່ນດຽວກັນກັບໃນປີ 1992-1993, ໃນທົ່ວປະເທດມີ 9 ແຂວງ ມີອັດຕາສ່ວນຄວາມທຸກຍາກສູງກວ່າລະດັບສະເລ່ຍຂອງປະເທດ. ໃນບັນດາ 9 ແຂວງນັ້ນ ມີ 7 ແຂວງ ທີ່ນອນຢູ່ໃນກຸ່ມແຂວງທີ່ 'ທຸກກວ່າລະດັບສະເລ່ຍຂອງປະເທດ' ທັງໃນປີ 2002-2003 ແລະ ປີ 1992-1993. ບັນດາແຂວງທີ່ 'ມີຄວາມທຸກຍາກແບບຕໍ່ເນື່ອງ' ແມ່ນແຂວງ ຜົ້ງສາລີ, ຫຼວງພະບາງ, ຫົວພັນ, ຊຽງຂວາງ, ສະຫວັນນະເຂດ, ເຊກອງ ແລະ ອັດຕະປື. ໃນປີ 1992-1993, 55% ຂອງປະຊາຊົນ ທຸກຍາກທີ່ອາໄສຢູ່ໃນເຂດຊົນນະບົດ ແມ່ນກະຈາຍກັນຢູ່ໃນ 7 ແຂວງທີ່ມີຄວາມທຸກຍາກຊຳເຮື້ອ. ດັ່ງນັ້ນ,ສິ່ງນີ້ໄດ້ສະແດງໃຫ້ເຫັນວ່າສະພາບຄວາມເຂັ້ມຂອງຄວາມທຸກຍາກໃນແຕ່ລະພາກແມ່ນມີການປ່ຽນແປງ ໃນທາບອກ. ສຳລັບຄວາມທຸກຍາກທາງດ້ານປະລິມານແລະອັດຕາສ່ວນຂອງພົນລະເມືອງໃນສາມແຂວງຄືແຂວງໄຊຍະບູລີ, ບໍລິຄຳໄຊ ແລະ ສາລະວັນ ແມ່ນມີ ເພີ່ມຂຶ້ນ ໃນໄລຍະເວລາດຽວກັນກັບເວລາທີ່ໄດ້ກ່າວ ມານັ້ນ (ຕາຕະລາງ 2.1).

ການປ່ຽນແປງ ແລະ ເຂດພື້ນທີ່ພູມສັນຖານຂອງຄວາມທຸກຍາກໃນເຂດຊົນນະບົດ:

1. ການເຄື່ອນຍ້າຍແຮງງານພາຍໃນ ແລະ ອອກນອກປະເທດ: ປະຊາຊົນຈຳນວນຫຼວງຫຼາຍໄດ້ເຄື່ອນຍ້າຍຈາກບ້ານເກີດເມືອງນອນຂອງຕົນໄປທຳມາຫາກິນ ແລະ ດຳລົງຊີວິດຢູ່ບ່ອນອື່ນ. ການເຄື່ອນຍ້າຍຂອງປະຊາຊົນ ບໍ່ວ່າຈະແມ່ນຜູ້ທຸກຍາກ ຫຼື ບໍ່ທຸກຍາກກໍ່ຕາມ ໄດ້ສົ່ງຜົນໃຫ້ອັດຕາຄວາມທຸກຍາກໃນຂົງເຂດທີ່ ມີການເຄື່ອນຍ້າຍມີການປ່ຽນແປງ ຊຶ່ງສາມາດເຫັນໄດ້ຈາກອັດຕາສ່ວນຄວາມທຸກຍາກ ໃນເຂດພູມລຳເນົາເດີມຈະຫຼຸດລົງໃນກໍລະນີທີ່ມີຜູ້ທຸກຍາກເຄື່ອນຍ້າຍອອກໄປຢູ່ເຂດອື່ນ. ໃນເວລາດຽວກັນນັ້ນ, ຢູ່ໃນພູມລຳເນົາ ຫຼື ສະຖານທີ່ປາຍທາງ ທີ່ມີຜູ້ທຸກຍາກເຄື່ອນຍ້າຍເຂົ້າໄປຢູ່ນັ້ນ ກໍ່ຈະມີອັດຕາສ່ວນຂອງຄົນທຸກຍາກ ເພີ່ມຫຼາຍຂຶ້ນ. ໃນກໍລະນີທີ່ມີຜູ້ບໍ່ທຸກຍາກເຄື່ອນຍ້າຍອອກໄປຢູ່ເຂດອື່ນ, ພູມລຳເນົາເດີມຂອງ ເຂົາເຈົ້າກໍ່ຈະມີອັດຕາສ່ວນຜູ້ ທຸກຍາກຫຼາຍຂຶ້ນ ແລະ ກົງກັນຂ້າມ ສະຖານທີ່ປາຍທາງກໍ່ຈະມີອັດຕາສ່ວນຂອງຄົນທຸກຍາກໜ້ອຍລົງ. ເຖິງແມ່ນວ່າຈະບໍ່ມີຂໍ້ມູນຕົວຈິງທີ່ໜ້າເຊື່ອຖືໄດ້ ກ່ຽວກັບ ການເຄື່ອນຍ້າຍແຮງງານພາຍໃນປະເທດກໍ່ຕາມ, ແຕ່ເຮົາກໍ່ສາມາດປະເມີນໄດ້ວ່າມີການເຄື່ອນຍ້າຍຂອງປະຊາຊົນຈາກພາກເໜືອ ແລະ ພາກຕາເວັນຕົກເຂົ້າມາສູ່ພາກກາງ, ພາກຕາເວັນອອກ ແລະ ເຂດທົ່ງພຽງເລາະລຽບຕາມລຳແມ່ນ້ຳຂອງຫຼາຍຂຶ້ນ ໂດຍເບິ່ງຈາກຄວາມແຕກຕ່າງ ຫຼື ຊ່ອງຫວ່າງທີ່ມີ ຫຼາຍຂຶ້ນລະຫວ່າງຕົວເລກຈຳນວນພົນລະເມືອງທີ່ຄວນຈະມີໃນສະຖານທີ່ໃດໜຶ່ງ (ໂດຍອີງໃສ່ອັດຕາການເກີດ ແລະ ການຕາຍ) ແລະ ຕົວເລກພົນລະເມືອງຕົວຈິງໃນສະຖານທີ່ນັ້ນ. ເຂດພາກກາງ/ພາກຕາເວັນອອກ ແລະ ເຂດທົ່ງພຽງລຽບແມ່ນ້ຳຂອງເອງກໍ່ຍັງເປັນເຂດທີ່ຈະເລີນຫຼາຍກວ່າ.

2. ສັດສ່ວນການປ່ຽນແປງຂອງຈຳນວນພົນລະເມືອງຕໍ່ຊັບພະຍາກອນທຳມະຊາດ: ພົນລະເມືອງມີການຂະຫຍາຍໂຕຫຼາຍຂຶ້ນ ແຕ່ລະດັບຂອງຊັບພະຍາກອນທຳມະຊາດ ພັດບົກແຫ້ງລົງ. ປະຊາຊົນອາໄສຊັບພະຍາກອນທຳມະຊາດເປັນບ່ອນອີງຕົ້ນຕໍໃນການດຳລົງຊີວິດ ຈະພົບພໍ້ກັບຄວາມທຸກຍາກ ແລະ ຂາດເຂີນ ຈາກສະພາບດັ່ງກ່າວ. ນອກຈາກນີ້, ການໂອນກຳມະສິດນຳໃຊ້ປ່າໄມ້ ແລະ ທີ່ດິນສາທາລະນະໃຫ້ແກ່ພາກເອກະຊົນ ກໍ່ເຮັດໃຫ້ປະຊາຊົນມີໂອກາດເຂົ້າເຖິງເນື້ອທີ່ປ່າໄມ້ ແລະ ທີ່ດິນສາທາລະນະໜ້ອຍລົງ.

3. ເມື່ອມີການນຳໃຊ້ທີ່ດິນເຂົ້າໃນການພັດທະນາໂຄງການ ຫຼື ມີການປ່ຽນແປງວິທີການຜະລິດກະສິກຳ (ເຊັ່ນ ຈາກການເຮັດໄຮ່ມາຜະລິດກະສິກຳຢູ່ທົ່ງພຽງ) ປະຊາຊົນຈະເກີດຄວາມຮູ້ສຶກບໍ່ຄຸ້ນເຄີຍກັບການປ່ຽນແປງດັ່ງກ່າວ ແລະ ຮູ້ສຶກເຖິງຄວາມບໍ່ແນ່ນອນໃນການດຳລົງຊີວິດຂອງເຂົາເຈົ້າຢ່າງໜ້ອຍກໍ່ແມ່ນໃນໄລຍະສັ້ນ. ສາເຫດສ່ວນໜຶ່ງຈາກບັນຫາດັ່ງກ່າວກໍ່ແມ່ນຍ້ອນການຍົກຍ້າຍ ແລະ ຈັດສັນພູມລຳເນົາໃໝ່ໃຫ້ແກ່ປະຊາຊົນທີ່ຍັງບໍ່ທັນມີຄວາມພ້ອມພຽງພໍ. ພົນລະເມືອງທີ່ໄດ້ຮັບຜົນກະທົບຫຼາຍທີ່ສຸດແມ່ນ:
   ກ. ປະຊາຊົນທີ່ຢູ່ໃນບ້ານຍົກຍ້າຍຈັດສັນໃໝ່,
   ຂ. ຊາວກະສິກອນທີ່ຢຸດເຊົາການປູກຝິ່ນ, ແລະ
   ຄ. ຊາວກະສິກອນຜູ້ທີ່ໄດ້ປ່ຽນຈາກການເຮັດໄຮ່ເຄື່ອນທີ່.

ການຂະຫຍາຍໂຕຂອງເສດຖະກິດໄດ້ຊ່ວຍຫຼຸດຜ່ອນຄວາມທຸກຍາກບໍ່? ອັດຕາສ່ວນຄວາມທຸກຍາກໄດ້ຫຼຸດລົງ 18.1% ໃນໄລຍະເວລາ 15 ປີ (1992/1993 - 2007/2008) ຫຼື ເທົ່າກັບ 3.3% ຕໍ່ປີ (ອັດຕາຄິດໄລ່ແບບທົບຕົ້ນຕໍ່ປີ), ໃນຂະນະທີ່ລວມ

18 ຊ່ອງຫວ່າງຄວາມທຸກຍາກ ແລະ ຄວາມໜັກໜ່ວງຂອງຄວາມທຸກຍາກແມ່ນທ່າອ່ຽງທີ່ຄ້າຍຄືກັນ. ເບິ່ງ GOL-UNDP (2008), Richter, van der Weide ແລະ ສຸກສະວັດ (2005), ແລະ ທະນາຄານໂລກ (2005). Chamberlain (2007) ພົບວ່າຄວາມທຸກຍາກແມ່ນພົບເຫັນຫຼາຍຢູ່ໃນບັນດາກຸ່ມຊົນເຜົ່າຕ່າງໆຫຼາຍກວ່າກຸ່ມເຜົ່າລາວ-ໄຕ, ແລະ ເຊັ່ນດຽວກັນກັບ Engvall (2006).

19 ການສຳຫຼວດພົນລະເມືອງຂອງປີ 2005 ເຫັນວ່າວ່າ ບໍ່ມີການເຄື່ອນຍ້າຍເຂົ້າໄປສູ່ນະຄອນຫຼວງວຽງຈັນຊຶ່ງເປັນແຂວງທີ່ມີປະຊາ ກອນຫຼາຍກວ່າໝູ່ (ເບິ່ງໜ້າ 22-23).

20 ບັນດາແຂວງເຫຼົ່ານີ້ ລວມມີ: ຜົ້ງສາລີ, ອຸດົມໄຊ, ຫຼວງພະບາງ, ຫົວພັນ, ຊຽງຂວາງ, ສະຫວັນນະເຂດ, ສາລະວັນ, ເຊກອງ ແລະ ອັດຕະປື.



ການສຶກສາຂັ້ນປະຖົມທີ່ມີຄຸນນະພາບສູງແມ່ນຈຳເປັນສຳລັບການສ້າງທຶນມະນຸດ ຄວາມສະເໝີພາບ ແລະ ຄວາມຍຸຕິທຳ

ຍອດຜະລິດຕະພັນພາຍໃນ (GDP) ຂະຫຍາຍໂຕປະມານ 6% ຕໍ່ປີ (ອັດຕາຄິດໄລ່ແບບທົບຕົ້ນຕໍ່ປີ) ໃນໄລຍະເວລາດຽວກັນ. ໂດຍລວມແລ້ວ, ອັດຕາການຫຼຸດຜ່ອນຄວາມທຸກຍາກແມ່ນບໍ່ສູງ ຫຼື ຕ່ຳຫຼາຍ. ພາຍໃນໄລຍະເວລາ 5 ປີ (1992/1993 - 1997/1998), ລວມຍອດຜະລິດຕະພັນພາຍໃນ (GDP) ຂະຫຍາຍໂຕໃນຈັງຫວະຊ້າ, ຄວາມທຸກຍາກໄດ້ຫຼຸດລົງ 3.3% ຕໍ່ປີ. ໃນໄລຍະເວລາ 5 ປີຕໍ່ມາ (1997/1998 - 2002/2003), ລວມຍອດຜະລິດຕະພັນພາຍໃນ (GDP) ຂະຫຍາຍໂຕໄວຂຶ້ນ, ອັດຕາການ ຫຼຸດລົງຂອງຄວາມທຸກຍາກແມ່ນ 3.1%. ສຸດທ້າຍ, ໃນໄລຍະ 5 ປີ (2002/2003 - 2007/2008) ລວມຍອດຜະລິດຕະພັນພາຍໃນ (GDP) ຂະຫຍາຍໂຕໃນຈັງຫວະໄວຂຶ້ນກວ່າເກົ່າ, ຄວາມທຸກຍາກຫຼຸດລົງ 3.4%. ສະນັ້ນ, ບໍ່ວ່າລາຍຮັບແຫ່ງຊາດຈະມີການຂະຫຍາຍໂຕໄປແນວໃດກໍ່ຕາມ ແຕ່ຄວາມທຸກຍາກກໍ່ຫຼຸດລົງໃນອັດ ຕາທີ່ເກືອບຈະຄົງທີ່ ຊຶ່ງສິ່ງນີ້ສະແດງໃຫ້ເຫັນວ່າ ສາຍພົວພັນລະຫວ່າງສອງຕົວປ່ຽນນີ້ແມ່ນບໍ່ຈະແຈ້ງປານໃດ. ສາຍພົວພັນແບບນີ້ ສ່ວນໜຶ່ງແມ່ນຍ້ອນສະພາບຄວາມເປັນຈິງທີ່ວ່າ ການນຳໃຊ້ແຮງງານນອກຂະແໜງກະສິກຳເພີ່ມຂຶ້ນບໍ່ສົມສ່ວນກັບການເຕີບໂຕທາງດ້ານເສດຖະກິດ: ກຳລັງແຮງງານຫຼາຍກວ່າ 3/4 ຍັງເຮັດວຽກໃນຂະແໜງກະສິກຳແບບຫຼ້າສະໄໝ[21].

ທ້າຍສຸດ, ກໍ່ຄືຄຳເວົ້າທີ່ວ່າ ການຊົມໃຊ້ບໍ່ມີຄວາມສະເໝີພາບ. ສຳປະສິດຄວາມບໍ່ເທົ່າທຽມກັນ (Gini) ເພີ່ມຂຶ້ນໃນໄລຍະ 1992/1993-1997/1998 ແຕ່ຫຼັງຈາກນັ້ນ ໃນປີ 2002/2003 ກໍ່ໄດ້ຫຼຸດລົງມາຢູ່ໃນລະດັບ 0.33. ເຖິງຢ່າງໃດກໍ່ຕາມ, ໃນລະຫວ່າງປີ 1992/1993 ຫາ 2002/2003 ສຳປະສິດ Gini ໄດ້ເພີ່ມຂຶ້ນຢ່າງໜ້າເປັນຫ່ວງ. ຕາຕະລາງທີ່ຄິດໄລ່ຈາກຂໍ້ມູນປີ 2007/2008 ສະແດງໃຫ້ເຫັນວ່າ ໃນໄລຍະ 2002/2003 - 2007/2008 (ສຳປະສິດ Gini ສຳລັບ 2007/2008 = 0.35) ຄວາມບໍ່ສະເໝີພາບຍິ່ງມີເພີ່ມສູງຂຶ້ນ ຊຶ່ງບັນ ຫານີ້ເປັນສິ່ງທີ່ໜ້າເປັນຫ່ວງ.

ຂໍ້ຄິດເຫັນຫຼາຍຢ່າງເພື່ອຫຼຸດຜ່ອນຄວາມທຸກຍາກ: ການຂະຫຍາຍວຽກເຮັດງານທຳ ແລະ ວິຖີການດຳລົງຊີວິດ ໃນລັກສະນະກະຈາຍໄປຕາມຂົງເຂດ, ການຂະຫຍາຍພື້ນຖານອາຊີບໃຫ້ມີຄວາມຫຼາກຫຼາຍ, ການຫັນເອົາປະຊາຊົນອອກຈາກການດຳລົງຊີວິດທີ່ຂຶ້ນກັບຊັບພະຍາກອນທຳມະຊາດໃນລັກສະນະນິ້ມນວນເໝາະສົມ, ແລະ ເພີ່ມທະວີຄວາມເຂັ້ມແຂງໃຫ້ແກ່ອົງປະກອບຂອງການດຳລົງຊີວິດໃນບ້ານຍົກຍ້າຍຈັດສັນ ແລະ ບ້ານເຕົ້າໂຮມໃໝ່.

## ສະຫຼຸບຫຍໍ້:

1. *ທ່າອ່ຽງ ແລະ ລັກສະນະຂອງຄວາມທຸກຍາກໃນແຕ່ລະແຂວງມີຄວາມແຕກຕ່າງກັນຢ່າງຫຼວງຫຼາຍ ຊຶ່ງ ສະແດງໃຫ້ເຫັນວ່າການກະຈາຍຜົນປະໂຫຍດຂອງການພັດທະນາບໍ່ວ່າຈະແມ່ນທາງດ້ານສັງຄົມ ກໍ່ຄື ດ້ານວັດຖຸໃຫ້ແກ່ປະຊາຊົນ ຍັງບໍ່ທັນມີຄວາມສະເໝີພາບ ແລະ ເທົ່າທຽມກັນໃນແຕ່ລະພາກ. ດັ່ງນັ້ນ, ຈຶ່ງ ຄວນພິຈາລະນາຍົກເອົາບັນຫາຄວາມບໍ່ສະເໝີພາບກັນລະຫວ່າງ ພາກຕ່າງໆເຫຼົ່ານີ້ ມາເປັນບູລິມະສິດ ສຳຄັນເພື່ອເອົາໃຈໃສ່ແກ້ໄຂ.*

21 ອີງຕາມ LECS1, LECS2 ແລະ LECS3, Engvall, Magnoli ແລະ Richter (2005) ພົບວ່າຄວາມທຸກຍາກໄດ້ຫຼຸດລົງຕາມການຂະຫຍາຍໂຕຂອງລວມຍອດຜະລິດຕະພັນພາຍໃນ(GDP). ໃນທາງສະຖິຕິ, ຕົວເລກຂອງເຂົາເຈົ້າເບິ່ງແລ້ວອາດມີຄວາມສົມເຫດສົມຜົນ, ແຕ່ສາຍເຫດອາດມີລັກສະນະບໍ່ເປັນເອກະພາບກັນ.

**ຮູບສະແດງ 2.2: ອັດຕາການຮູ້ໜັງສືຂອງພົນລະເມືອງທີ່ມີອາຍຸ 15 ປີ ແລະ ສູງກວ່າ 15 ປີ ແບ່ງຕາມເພດ ໃນປີ 1995 ແລະ 2005**




***ແຫຼ່ງຂໍ້ມູນ:*** *ການສຳຫຼວດພົນລະເມືອງ ປີ 1995 ແລະ 2005; (GOL (1997) ແລະ GOL (2006a).*

2. *ມີການເຄື່ອນຍ້າຍຂອງປະຊາຊົນຢ່າງຫຼວງຫຼາຍພາຍໃນແຂວງ, ລະຫວ່າງແຂວງ ແລະ ລວມທັງການ ເຄື່ອນຍ້າຍອອກນອກປະເທດ.ການຕິດຕາມກວດກາການເຄື່ອນຍ້າຍເຫຼົ່ານີ້ຈະຊ່ວຍໃນການກຳນົດເອົາເຂົາເຈົ້າມາເປັນເປົ້າໝາຍ ເພື່ອປັບປຸງການດຳລົງຊີວິດ ແລະ ສະພາບເງື່ອນໄຂການເຮັດວຽກຂອງເຂົາ ເຈົ້າໃຫ້ ດີຂຶ້ນ.*

3. *ມີຄວາມຈຳເປັນໃຫ້ດຳເນີນການວັດແທກ ແລະ ຕິດຕາມຄວາມທຸກຍາກໃນຂັ້ນແຂວງ ແລະ ເມືອງ. ການວັດແທກດັ່ງກ່າວຈະຍົກໃຫ້ເຫັນບັນຫາຕ່າງໆທີ່ພົວພັນເຖິງການດຳລົງຊີວິດຂອງປະຊາຊົນ ໃນເຂດຊົນນະບົດ ໂດຍສະເພາະກໍ່ແມ່ນບັນຫາທີ່ປະຊາຊົນບັນດາເຜົ່າພວມຜະເຊີນໜ້າຢູ່.*

4. *ພາກລັດຄວນກຳນົດເອົາແຂວງ ແລະ ພາກຕ່າງໆ ທີ່ມີອັດຕາຄວາມທຸກຍາກເພີ່ມຂຶ້ນມາເປັນເຂດຈຸດສຸມ ເພື່ອດຳເນີນການແກ້ໄຂ.*

5. *ຄວນຈັດຕັ້ງດຳເນີນການຕິດຕາມກວດກາສາຍພົວພັນລະຫວ່າງ ການເຕີບໂຕ ແລະ ຄວາມທຸກຍາກ ເພື່ອ ຮັບປະກັນການເອົາໃຈໃສ່ຊ່ວຍເຫຼືອເພື່ອໃຫ້ເກີດຜົນປະໂຫຍດແກ່ພົນລະເມືອງທຸກຊັ້ນຄົນໃນສັງຄົມ.*

## ການສ້າງຄວາມເຂັ້ມແຂງໃຫ້ແກ່ມະນຸດ: ການຮູ້ໜັງສື, ການສຶກສາ ແລະ ສຸຂະພາບ

ການສຶກສາ ແລະ ທັກສະສີມື ຊ່ວຍເພີ່ມຄວາມສາມາດຂອງແຮງງານໃນການມີວຽກເຮັດງານທຳດີ. ສາຍພົວພັນລະຫວ່າງຄຸນນະພາບຂອງວຽກເຮັດງານທຳທີ່ດີກວ່າ, ຄວາມຮູ້ ແລະ ສຸຂະພາບ ໄດ້ປະກົດຂຶ້ນມານານ ຫຼາຍກວ່າ 4 ທົດສະວັດແລ້ວ. ຢູ່ໃນໂລກທີ່ຄວາມຮູ້ມີບົດບາດສຳຄັນ, ແມ່ຍິງທີ່ມີບົດບາດເບິ່ງແຍງຄອບຄົວເຮືອນຊານ ກໍ່ສາມາດປະກອບສ່ວນໃນການສ້າງລາຍຮັບ ແລະ ປັບປຸງຄຸນນະພາບຊີວິດຂອງພວກເຂົາເອງ ແລະ ລູກຫຼານໃຫ້ດີຂຶ້ນໄດ້ເໝືອນກັນ ໂດຍການປະຕິບັດແບບແຜນການດຳລົງຊີວິດທີ່ມີລັກສະນະວິທະຍາ ສາດ ແລະ ແວດລ້ອມເປັນທີ່ໜ້າຢູ່ອາໄສ[22].

### ອັດຕາການຮູ້ໜັງສື ແລະ ອື່ນໆ

ອັດຕາການຮູ້ໜັງສື (ຫຼືເວົ້າງ່າຍໆວ່າ ຄວາມສາມາດໃນການອ່ານ ແລະ ການຂຽນ) ແມ່ນອັດຕາສ່ວນຂອງຈຳ ນວນພົນລະເມືອງທີ່ຮູ້ໜັງສື ຕໍ່ກຸ່ມພົນລະເມືອງທີ່ມີອາຍຸແຕ່ 15 ປີ ຂຶ້ນໄປ. ອັດຕາການຮູ້ໜັງສືໂດຍລວມໃນ ພົນລະເມືອງ ທີ່ເປັນຜູ້ໃຫຍ່ ມີເພີ່ມຂຶ້ນມາຢູ່ໃນລະດັບ 72.7% ໃນປີ 2005, ຫຼື ເພີ່ມຂຶ້ນ 12.5% ໃນປີ 1995 (ຮູບສະແດງ 2.2). ໃນໄລຍະເວລາດັ່ງກ່າວ ພົນລະເມືອງລາວ ມີການຂະຫຍາຍໂຕຢ່າງວ່ອງໄວ; ສະນັ້ນ, ອັດຕາການເພີ່ມຂຶ້ນດັ່ງກ່າວ ແມ່ນເຊື່ອງຊ້ອນຜົນສຳເລັດທີ່ແທ້ຈິງ. ເຖິງແມ່ນວ່າອັດຕາການຮູ້ໜັງສືຂອງແມ່ຍິງ ມີຕ່ຳກວ່າອັດຕາຂອງຜູ້ຊາຍໃນແຕ່ລະແຂວງກໍ່ຕາມ, ແຕ່ຊ່ອງຫວ່າງບົດບາດຍິງ-ຊາຍໄດ້ຫຼຸດລົງໃນລະດັບໃດ ໜຶ່ງໃນໄລຍະເວລາດຽວກັນ: ອັດຕາການຮູ້ໜັງສືຂອງແມ່ຍິງໄດ້ຮັບການປັບປຸງດີຂຶ້ນ 15.3% ແຕ່ສ່ວນອັດຕາ ການຮູ້ໜັງສືຂອງຜູ້ຊາຍເພີ່ມຂຶ້ນພຽງແຕ່ 9%.

ເຖິງຢ່າງໃດກໍ່ຕາມ, ຍັງມີປັດໄຈອີກຫຼາຍດ້ານທີ່ພົວພັນເຖິງການຮູ້ໜັງສື ນອກຈາກຕົວເລກອັດຕາການຮູ້ໜັງສື ທີ່ໄດ້ມາຈາກການລາຍງານຂອງປະຊາຊົນເອງ. ການຮູ້ໜັງສືຂັ້ນພື້ນຖານ ໃນປີ

22 ລາຍລະອຽດຢູ່ໃນ Becker (1993); Schultz (1963); ທະນາຄານໂລກ (1993); ທະນາຄານໂລກ (1995).

**ຮູບສະແດງ 2.3: ອັດຕາການຮູ້ໜັງສື ຂອງພົນລະເມືອງ ທີ່ມີອາຍຸ 15 ປີ ແລະ ສູງກວ່າແບ່ງຕາມໝວດພາສາ ແລະ ເພດ ໃນປີ 2005**




***ແຫຼ່ງຂໍ້ມູນ:*** *ການສຳຫຼວດພົນລະເມືອງ ປີ 2005 (GOL (2006a).*

***ໝາຍເຫດ:*** *ກຸ່ມເຜົ່າຕາມໝວດພາສາລາວ-ໄຕ ໄດ້ແບ່ງອອກ ເປັນສອງກຸ່ມຍ່ອຍ ຄື 'ລາວ' ແລະ ກຸ່ມ 'ອື່ນໆ ທີ່ນອນໃນກຸ່ມເຜົ່າໝວດພາສາລາວ-ໄຕ' ເພື່ອໃຫ້ເຫັນ ການແບ່ງປະເພດທີ່ລະອຽດກວ່າ.*

**ຕາຕະລາງ 2.2: ອັດຕາການຮູ້ໜັງສື ໃນປີ 1995 ແລະ ການປ່ຽນແປງ ໃນອັດຕາການຮູ້ໜັງສື ໃນໄລຍະປີ 1995-2005 ຂອງພົນລະເມືອງ ທີ່ມີອາຍຸ 15 ປີ ແລະ ສູງກວ່າ 15 ປີ ແບ່ງຕາມແຂວງ**

| ການປ່ຽນແປງຂອງອັດຕາການຮູ້ໜັງສື 1995-2005 (%) | ລະດັບການຮູ້ໜັງສື 1995: ສູງ | ລະດັບການຮູ້ໜັງສື 1995: ຕ່ຳ |
|---|---|---|
| ສູງ | ໄຊຍະບູລີ, ຊຽງຂວາງ | ຜົ້ງສາລີ, ຫຼວງນ້ຳທາ, ອຸດົມໄຊ, ບໍ່ແກ້ວ, ຫຼວງພະບາງ, ຄຳມ່ວນ, ສາລະວັນ, ເຊກອງ, ອັດຕະປື |
| ຕ່ຳ | ນະຄອນຫຼວງວຽງຈັນ, ແຂວງວຽງຈັນ, ບໍລິຄຳໄຊ, ຈຳປາສັກ | ຫົວພັນ, ສະຫວັນນະເຂດ |

***ແຫຼ່ງຂໍ້ມູນ:*** *ການສຳຫຼວດພົນລະເມືອງ ປີ 1995 ແລະ 2005 (GOL (1997) ແລະ GOL (2006a); 'ສູງ' ໝາຍເຖິງ ຫຼາຍກວ່າຄ່າ ສະເລ່ຍຂອງປະເທດ, ແລະ 'ຕ່ຳ' ໝາຍເຖິງຕ່ຳກວ່າຄ່າສະເລ່ຍຂອງປະເທດ.*

2001 ແມ່ນມີອັດຕາທີ່ຕ່ຳກວ່າກໍ່ຄືໃນລະດັບ 45% (ຊາຍ: 54, ຍິງ: 37); ອັດຕາການຮູ້ໜັງສືຂັ້ນຕົ້ນ ແມ່ນ 38 % (ຊາຍ: 45, ຍິງ: 30) ແລະ ອັດຕາການຮູ້ໜັງສືລະດັບສູງກວ່າຂັ້ນຕົ້ນແມ່ນ 31% (ຊາຍ: 37,ຍິງ: 25)[23]. ລະດັບການຮູ້ໜັງສືຂັ້ນ ຕົ້ນທີ່ມີອັດຕາຕ່ຳດັ່ງກ່າວແມ່ນໂຕຊີ້ບອກທີ່ຊັດເຈນເຖິງຄວາມບໍ່ເຂັ້ມແຂງຂອງແຮງງານຍິງເວົ້າສະເພາະກໍ່ ແມ່ນໃນໜ້າທີ່ວຽກງານ ແລະ ໃນດ້ານການດຳເນີນຊີວິດເວົ້າລວມ.

ການຂະຫຍາຍໂຕຂອງອັດຕາການຮູ້ໜັງສືໃນລະດັບພາກ ກໍ່ມີລັກສະນະ ບໍ່ສະໝ່ຳສະເໝີກັນ: ໃນປີ 2005, ອັດຕາການຮູ້ໜັງສືໃນ 11 ແຂວງໃນຈຳນວນ 17 ແຂວງທົ່ວປະເທດ ຫຼຸດລົງຕ່ຳກວ່າຄ່າສະເລ່ຍຂອງປະເທດຊຶ່ງສ່ວນໃຫຍ່ແມ່ນຢູ່ແຂວງພາກເໜືອ: ຜົ້ງສາລີ, ຫຼວງນ້ຳທາ, ອຸດົມໄຊ, ບໍ່ແກ້ວ, ຫຼວງພະບາງ ແລະ ຫົວພັນ; ບາງແຂວງໃນເຂດພາກໃຕ້: ສາລະວັນ, ເຊກອງ ແລະ ອັດຕະປື; ແລະ 2 ແຂວງໃນເຂດພາກກາງ: ຄຳມ່ວນ ແລະ ສະຫວັນນະເຂດ. ສອງແຂວງພາກກາງດັ່ງກ່າວນີ້ ຍັງສະທ້ອນເຖິງຈຸດອ່ອນທີ່ຊີ້ໃຫ້ເຫັນວ່າ ແຂວງບໍ່ ທຸກຍາກ ແລະ ບໍ່ໂດດດ່ຽວກໍ່ສາມາດມີຄວາມຫຼ້າຫຼັງໝູ່ໃນດ້ານການຮູ້ໜັງສືໄດ້ຄືກັນ. ອີກຄວາມໝາຍໜຶ່ງກໍ່ ຄືບໍ່ແມ່ນຕົວຊີ້ບອກດ້ານການພັດທະນາທຸກຕົວ ຈະໄປໃນລວງດຽວກັນ, ຊຶ່ງເປັນຈຸດທີ່ຮຽກຮ້ອງໃຫ້ມີການຕິດຕາມຫຼາຍໆຕົວຊີ້ບອກໄປພ້ອມໆກັນ.

ຕາຕະລາງ 2.2 ຈັດແບ່ງແຂວງຕາມລະດັບການຮູ້ໜັງສື ໃນປີ 1995 ແລະ ອັດຕາການປ່ຽນແປງ ໃນລະ ຫວ່າງປີ 1995 ແລະ 2005. ແຂວງໄຊຍະບູລີ ແລະ ຊຽງຂວາງ ມີອັດຕາການຮູ້ໜັງສືສູງ

23 ອັດຕາການຮູ້ໜັງສືດັ່ງກ່າວ ແມ່ນຄິດໄລ່ໂດຍຜ່ານການທົດສອບ. ການສຳຫຼວດຫຼ້າສຸດ ແມ່ນດຳເນີນໃນປີ 2001 ໂດຍກະຊວງສຶກສາທິການ. ລາຍລະອຽດເພີ່ມເຕີມເບິ່ງໄດ້ຈາກ MOE (2008a).

**ຮູບສະແດງ 2.4: ອັດຕາສ່ວນຂອງປະຊາກອນຮູ້ໜັງສື ທີ່ຫາກໍ່ເຂົ້າມາຢູ່ໃນແຕ່ລະກຸ່ມອາຍຸທີ່ກ່ຽວຂ້ອງຕໍ່ປະຊາກອນທີ່ຫາກໍ່ເຂົ້າມາຢູ່ໃນແຕ່ລະກຸ່ມອາຍຸທີ່ກ່ຽວຂ້ອງ (LANERAG/NERAG) ປີ 1995-2005, ແບ່ງຕາມ ແຂວງ ແລະ ເພດ**




**ແຫຼ່ງຂໍ້ມູນ:** ການຄິດໄລ່ຈາກການສຳຫຼວດພົນລະເມືອງໃນປີ 1995 ແລະ 2005 (ລັດຖະບານລາວ (1997) ແລະ ລັດຖະບານລາວ (2006ກ)).

ໃນປີ 1995 (ສູງກວ່າຄ່າສະເລ່ຍຂອງປະເທດ) ແລະ ຮັກສາອັດຕາການປ່ຽນແປງສູງຈົນຮອດປີ 2005. ແຂວງຜົ້ງສາລີ, ຫຼວງນ້ຳທາ, ອຸດົມໄຊ, ບໍ່ແກ້ວ, ຫຼວງພະບາງ, ຄຳມ່ວນ, ສາລະວັນ, ເຊກອງ ແລະ ອັດຕະປື ມີອັດຕາການຮູ້ໜັງສືຕ່ຳ ໃນປີ 1995 (ຕ່ຳກວ່າຄ່າສະເລ່ຍຂອງປະເທດ) ແຕ່ໄດ້ຮັບການປັບປຸງໃຫ້ດີຂຶ້ນໃນໄລຍະປີ 1995-2005. ເຖິງຢ່າງໃດກໍ່ຕາມ, ແຂວງຫົວພັນ ແລະ ສະຫວັນນະເຂດ ໄດ້ຈັດເຂົ້າໃນກຸ່ມທີ່ມີອັດຕາການຮູ້ໜັງສືຕ່ຳ (ໃນປີ 1995) ແລະ ມີອັດຕາທີ່ຕ່ຳລົງລະຫວ່າງປີ 1995 ຫາ 2005. ອັນນີ້ຄືບັນຫາທີ່ໜ້າເປັນຫ່ວງ ແລະ ຮຽກຮ້ອງໃຫ້ມີການເອົາໃຈໃສ່ຕໍ່ມາດຕະການແກ້ໄຂຈາກພາກລັດ ເພື່ອເພີ່ມອັດຕາການຮູ້ໜັງສືໃນບັນດາແຂວງ ເຫຼົ່ານີ້ໃຫ້ສູງຂຶ້ນ.

ອັດຕາການຮູ້ໜັງສື ໃນແຕ່ລະກຸ່ມເຜົ່າຕາມໝວດພາສາແມ່ນແຕກໂຕນກັນ. ກຸ່ມທີ່ເວົ້າພາສາລາວ ມີອັດຕາການຮູ້ໜັງສືສູງທີ່ສຸດ, ຮອງລົງມາກໍ່ແມ່ນກຸ່ມຍ່ອຍອື່ນທີ່ນອນໃນ ກຸ່ມເຜົ່າໝວດພາສາ ລາວ-ໄຕ (ຮູບສະແດງ 2.3). ອີກ 3 ກຸ່ມກໍ່ຄື ມອນ-ຂະແມ, ຈີນ-ຕີເບດ, ແລະ ມົ້ງ-ອີວມຽນ ແມ່ນມີອັດຕາການຮູ້ໜັງສືທີ່ຕ່ຳກວ່າ. ນອກຈາກ ກຸ່ມເຜົ່າຕາມໝວດພາສາລາວ-ໄຕແລ້ວ, ອັດຕາການຮູ້ໜັງສືລະຫວ່າງຍິງ-ຊາຍໃນບັນດາກຸ່ມຊົນເຜົ່າອື່ນໆກໍ່ມີຄວາມແຕກໂຕນກັນຫຼາຍ. ນອກຈາກການຂາດຄວາມຮັບຮູ້ ກ່ຽວກັບ ຜົນປະໂຫຍດຂອງການສຶກສາໃນກຸ່ມເຜົ່າເຫຼົ່ານີ້ແລ້ວ (ເນື່ອງຈາກທີ່ຕັ້ງພູມສັນຖານຂອງເຂົາເຈົ້າຢູ່ ຫ່າງໄກສອກຫຼີກ) ກໍ່ຍັງຂາດເຂີນໂຮງຮຽນ ແລະ ຄູສອນທີ່ສາມາດເວົ້າໄດ້ຫຼາຍພາສາໃນສະຖານທີ່ໃກ້ຄຽງກັບບ່ອນທີ່ພວກເຂົາອາໄສຢູ່ (ກ່ອງ 2.2). ສະຫຼຸບແລ້ວ, ປະມານ 81% ຂອງ ຄູສອນແມ່ນ ລາວ-ໄຕ, 14% ແມ່ນມອນ-ຂະແມ ແລະ 5% ແມ່ນມົ້ງ-ອີວມຽນ (ຈີນ-ຕີເບດ). ເນື່ອງຈາກວ່າຄູສອນຊົນເຜົ່າທີ່ເປັນ ລາວ-ໄຕ ສ່ວນໃຫຍ່ບໍ່ຈຳເປັນເວົ້າພາສາອື່ນທີ່ບັນດາຊົນເຜົ່າອື່ນໃຊ້ສື່ສານກັນ, ດັ່ງນັ້ນ ປະສິດທິພາບການສອນຈຶ່ງຍັງຕ່ຳ.[24].

ການທີ່ສັດສ່ວນຂອງປະຊາກອນບໍ່ເຄີຍເຂົ້າໂຮງຮຽນຫຼຸດລົງຈາກ 37.6% ໃນປີ 1995 ມາເປັນ 22.8% ໃນປີ 2005 ຖືວ່າແມ່ນຜົນສຳເລັດດີຫຼາຍ. ເຖິງຢ່າງໃດກໍ່ຕາມ, ຄວາມແຕກຕ່າງລະຫວ່າງຊົນເຜົ່າກໍ່ຍັງມີຢູ່: ໃນຊົນເຜົ່າລາວ ຜູ້ທີ່ບໍ່ເຄີຍເຂົ້າໂຮງຮຽນມີປະມານ 12%, ເຜົ່າຂະມຸ ມີ 33%, ເຜົ່າມົ້ງມີ 25% ແລະ ຊົນເຜົ່າຕຣີ, ອາຄາ, ແລະ ໂລໂລ ມີຫຼາຍກວ່າ 75 % [25].

## ການຮູ້ໜັງສືຂອງປະຊາກອນທີ່ຫາກໍ່ເຖິງເກນອາຍຸແຮງງານຕາມແຕ່ລະໝວດອາຍຸ

ການຮູ້ໜັງສືຂອງປະຊາກອນທີ່ເຂົ້າເປັນແຮງງານຕາມແຕ່ລະເກນອາຍຸ (ຫຼື ຂຽນຫຍໍ້ໃນພາສາອັງກິດວ່າ LANERAG) ໝາຍເຖິງ

24 MOE (2008a).

25 ການສຳຫຼວດພົນລະເມືອງ ປີ 2005, ໜ້າ 51 (ລັດຖະບານລາວ 2006a)



ໂຄງລ່າງພື້ນຖານທີ່ເປັນໂຮງຮຽນຢູ່ຊົນນະບົດແມ່ນເງື່ອນໄຂທຳອິດສຳລັບການສິດສອນທີ່ດີ

ການຮູ້ໜັງສືຂອງປະຊາກອນທີ່ມີອາຍຸຮອດ 15 ປີ ແລະ ສູງກວ່າ ໃນລະຫວ່າງປີ 1995-2005. ຜົນດີຂອງການຄິດໄລ່ LANERAG ມີຢູ່ວ່າການຄິດໄລ່ດັ່ງກ່າວ ບໍ່ລວມເອົາປະຊາກອນທີ່ມີ ອາຍຸສູງ ທີ່ມີແນວໂນ້ມວ່າ ຈະບໍ່ໄດ້ຮັບການສຶກສາໃນເກນອາຍຸດັ່ງກ່າວ. ອັດຕາສ່ວນຂອງ LANERAG ຕໍ່ກັບປະຊາກອນເຖິງເກນອາຍຸແຮງງານຕາມແຕ່ລະໝວດອາຍຸ (NERAG) ສຳລັບ ທຸກຄົນທັງຍິງ ແລະ ຊາຍແມ່ນ ມີອັດຕາສ່ວນຫຼາຍກວ່າ 1, ຊຶ່ງສະແດງໃຫ້ເຫັນວ່າ ອັດຕາການຮູ້ໜັງສືຂອງປະຊາກອນ ໃນກຸ່ມອາຍຸດັ່ງກ່າວ (LANERAG) ແມ່ນມີຫຼາຍກວ່າຈຳນວນປະຊາກອນທີ່ເພີ່ມຂຶ້ນ; ອີກຄວາມໝາຍໜຶ່ງກໍ່ຄື ປະຊາກອນທີ່ມີອາຍຸສູງ ໄດ້ຮັບການຮຽນຮູ້ ແລະ ກາຍເປັນຄົນຮູ້ໜັງສືຄືກັນ (ຮູບສະແດງ 2.4 ທ່ອນສຸດທ້າຍ). ຕົວເລກນີ້ ເປັນຕົວເລກທີ່ໜ້າພໍໃຈ.

ໃນລະດັບແຂວງກໍ່ເຊັ່ນດຽວກັນ ອັດຕາ LANERAG/NERAG ແມ່ນມີຄ່າເທົ່າ 1 ຫຼື ສູງກວ່າ ຍົກເວັ້ນແຕ່ ແຂວງວຽງຈັນເທົ່ານັ້ນທີ່ມີຄ່າຕ່ຳກວ່າ 1. ອັດຕາ LANERAG/NERAG ທີ່ມີຕ່ຳໃນແຂວງວຽງຈັນ (ເປັນແຂວງທີ່ຂ້ອນຂ້າງໄດ້ຮັບການພັດທະນາດີເມື່ອທຽບກັບແຂວງອື່ນ) ແລະ ໃນ ແຂວງ ເຊກອງ ອັດຕາດັ່ງກ່າວແມ່ນມີຄ່າ 1.4 ແລະ ແຂວງ ອຸດົມໄຊ ຕ່ຳກວ່າ 1 (ສຳລັບແມ່ຍິງ) (ຊຶ່ງ 2 ແຂວງນີ້ແມ່ນແຂວງທີ່ມີການພັດທະນາຂ້ອງຂ້າງຕ່ຳເມື່ອທຽບກັບແຂວງອື່ນ) ໄດ້ຊີ້ໃຫ້ເຫັນວ່າ ບັນດາຕົວປ່ຽນຂອງການພັດທະນາ ບໍ່ເປັນໄປໃນ ລວງດຽວກັນ. ສຳລັບຄຳອະທິບາຍຕໍ່ກັບລັກສະນະດັ່ງກ່າວນີ້ ກໍ່ຄືຄຳຕອບຂອງຄຳຖາມທີ່ວ່າມີການ ເຄື່ອນຍ້າຍຂອງຊາວໜຸ່ມທີ່ຮູ້ໜັງສືອອກຈາກ ແຂວງອຸດົມໄຊ ແລະ ໃນເວລາດຽວກັນກໍ່ມີການເຄື່ອນຍ້າຍຂອງຊາວໜຸ່ມທີ່ບໍ່ຮູ້ໜັງສືເຂົ້າມາແຂວງ ວຽງຈັນ ຫຼື ບໍ່? ສຳລັບ ສປປ ລາວ ແລ້ວ, ຄວນດຳເນີນ ການຕິດຕາມກວດກາການເຄື່ອນຍ້າຍພາຍໃນປະເທດຢ່າງລະອຽດ.

### ກ່ອງ 2.2: ທັດສະນະ ແລະ ຄວາມຄິດເຫັນຕໍ່ການສຶກສາ

'ໂຮງຮຽນຢູ່ບ້ານຂອງພວກເຮົາ ສອນຮອດແຕ່ປະຖົມປີທີ 2 ເທົ່ານັ້ນ ແລະ ພວກເຮົາກໍ່ຮຽນຈົບຫ້ອງ ປ.2 ເທົ່າ ນັ້ນ. ຖ້າພວກເຮົາຢາກຮຽນຕໍ່ກໍ່ຕ້ອງໄປຮຽນຢູ່ບ້ານໃກ້ຄຽງໄກປະມານ 3 ກມ. ການທີ່ເດັກນ້ອຍນັກຮຽນຍິງຄື ພວກເຮົາຕ້ອງເດີນທາງໄກທຸກໆວັນເພື່ອໄປຮຽນຕໍ່ຢູ່ໂຮງຮຽນບ້ານອື່ນຄືແນວນັ້ນ ມັນບໍ່ແມ່ນເລື່ອງງ່າຍ, ທັງຍັງບໍ່ປອດໄພ ແລະ ພາຫານະໃນການເດີນທາງທີ່ມີກໍ່ແພງຫຼາຍ.

'ພວກເຮົາອາດມີຄວາມເພີ້ຝັນສວຍງາມ ທີ່ຈະໄດ້ຮັບການສຶກສາວິຊາຊີບດ້ານການຕັດຫຍິບ, ການເສີມສວຍ ຫຼື ເສີມຄວາມງາມຕາມຍຸກສະໄໝນິຍົມ... ຄືດັ່ງພວກເຮົາເຄີຍເຫັນໃນໂທລະພາບ ຊຶ່ງເຮັດໃຫ້ພວກເຮົາໄດ້ ແນວຄວາມຄິດຄືແນວນັ້ນ... ແຕ່ໂຮງຮຽນວິຊາຊີບຢູ່ເມືອງປາກເຊ ພັດຫ່າງໄກຈາກບ້ານພວກເຮົາຫຼາຍກວ່າ 60 ກິໂລແມັດ. ພວກເຮົາບໍ່ມີຫົນທາງຊ່ວຍເຫຼືອຕົນເອງໄດ້ ແລະ ກໍ່ບໍ່ມີພີ່ນ້ອງຢູ່ໃນເມືອງ ພໍທີ່ຈະພັກພາອາໄສຢູ່ນຳໄດ້. ຄວາມຈິງແລ້ວ ພວກເຮົາກໍ່ບໍ່ຮູ້ຮອດຄ່າໃຊ້ຈ່າຍຕ່າງໆທີ່ພົວພັນເຖິງການຮຽນຊ້ຳ, ແຕ່ກໍ່ຮູ້ວ່າພວກເຮົາຂາດເງື່ອນໄຂດ້ານການເງິນ ແລະ ຂາດອຸປະກອນຊຸກຍູ້ເພື່ອໃຫ້ມີໂອກາດໄດ້ເຂົ້າຮຽນ'.

**ກຸ່ມສົນທະນາກັບກຸ່ມໄວໜຸ່ມຍິງ [ຊົນເຜົ່າກະຕາງ (ມອນ-ຂະແມ)],**
**ບ້ານສອງໂຮງນ້ອຍ,**
**ເມືອງເຫຼົ່າງາມ,**
**ແຂວງ ສາລະວັນ,**
**ສຳຫຼວດພາກສະໜາມ:** ກັນຍາ-ຕຸລາ, 2007

**ຮູບສະແດງ 2.5: ອັດຕາສ່ວນຂອງໂຮງຮຽນມູນລະປະຖົມ ແລະ ອັດຕາການປະລະໂຮງຮຽນປະຖົມ ແບ່ງຕາມ ແຂວງ, ໃນສົກຮຽນ 2004-2005**




**ແຫຼ່ງຂໍ້ມູນ:** ກະຊວງສຶກສາ (2008a).

## ອັດຕາການເຂົ້າຮຽນ[26]

ການເຂົ້າໂຮງຮຽນແບບຕໍ່ເນື່ອງ ເປັນການຮັບປະກັນໃຫ້ແກ່ການສ້າງຄົນໃຫ້ມີຄວາມຮູ້, ມີຄຸນສົມບັດດີປະຈຳຕົວຊ່ວຍໃຫ້ມີຄວາມສາມາດໃນການຊອກວຽກເຮັດງານທຳໄດ້ດີກວ່າໃນອານາຄົດ. ຫຼາຍຕົວປ່ຽນ ເຊັ່ນ: ການເຂົ້າໂຮງຮຽນ, ການມາໂຮງຮຽນ, ການສືບຕໍ່ຮຽນຈົນຈົບ (ບໍ່ປະລະ) ແລະ ອື່ນໆ ແມ່ນມີຄວາມສຳຄັນ ແລະ ຈຳເປັນສຳລັບບັນຫາດັ່ງກ່າວນີ້[27].

ໃນໄລຍະປີ2005-06, ອັດຕາເຂົ້າຮຽນສຸດທິຂອງເດັກນ້ອຍແມ່ຍິງ (NER) ໃນຊັ້ນປະຖົມສຶກສາແມ່ນ 86% ແລະ ເດັກນ້ອຍຜູ້ຊາຍແມ່ນ 81%. ສຳລັບແຂວງຫຼວງນ້ຳທາ, ຜົ້ງສາລີ ແລະ ສາລະວັນ[28] ນັ້ນ ຍັງມີອັດຕາການເຂົ້າຮຽນ ຕ່ຳຫຼາຍຄືມີພຽງແຕ່ 50% ເທົ່ານັ້ນ. ສະນັ້ນ, ເພື່ອໃຫ້ບັນລຸອັດຕາເຂົ້າສຸດທິສູງເຖິງ100% ໄດ້ນັ້ນຈະຕ້ອງໄດ້ພະຍາຍາມເອົາໃຈໃສ່ເປັນພິເສດ. ໃນດ້ານບົດບາດຍິງ-ຊາຍ, ແຂວງທີ່ມີຄວາມສະເໝີພາບດ້ານຍິງ-ຊາຍນີ້ ມີພຽງແຕ່ແຂວງອຸດົມໄຊ, ບໍລິຄຳໄຊ ແລະ ຄຳມ່ວນ ເທົ່ານັ້ນ. ເມື່ອເບິ່ງໃນດ້ານຊົນເຜົ່າແລ້ວກໍ່ເຫັນວ່າຊົນເຜົ່າລາວ-ໄຕເຂົ້າໂຮງຮຽນຫຼາຍກວ່າໝູ່ເມື່ອທຽບກັບກຸ່ມຊົນເຜົ່າອື່ນ[29]. ນອກຈາກນັ້ນ, ອັດຕາ ການມາໂຮງຮຽນຂອງເດັກນັກຮຽນຊາຍ (NAR) ໃນປີ 2006 ແມ່ນ 69.9% ແລະ ເດັກນັກຮຽນຍິງ ແມ່ນ 67.9% ຊຶ່ງສະແດງໃຫ້ເຫັນວ່າຜູ້ເຂົ້າໂຮງຮຽນບໍ່ມາຮຽນໜັງສື[30] ມີຢູ່ລະຫວ່າງ 10 - 15%. ອັດຕາການມາໂຮງຮຽນ (NAR) ຂອງກຸ່ມຄົນຮັ່ງມີກວ່າ ແມ່ນສູງກວ່າເມື່ອທຽບກັບກຸ່ມຄົນທຸກຍາກກວ່າ ແລະ ອັດຕາການ ມາໂຮງຮຽນຂອງເຜົ່າລາວ-ໄຕ ກໍ່ສູງກວ່າ ເມື່ອທຽບກັບເຜົ່າອື່ນໆ: ອັດຕາການມາໂຮງຮຽນຂອງເດັກນ້ອຍຈາກເຜົ່າຈີນ-ຕິເບດ ແມ່ນມີຕ່ຳທີ່ສຸດ ສະຫຼຸບແລ້ວ, ອັດຕາການປະລະໂຮງຮຽນ ແມ່ນສູງທີ່ສຸດສຳລັບປີທຳອິດຂອງການເຂົ້າໂຮງຮຽນ, ໃນນັ້ນຈະເຫັນວ່າ ມີນັກຮຽນຍິງປະລະໂຮງຮຽນຫຼາຍກວ່ານັກຮຽນຊາຍ. ອັດຕາ ການປະລະໂຮງຮຽນສຳລັບຂັ້ນ ປໍ.5 ແມ່ນເພີ່ມສູງຂຶ້ນ ແຕ່ວ່າຄວາມແຕກໂຕນລະຫວ່າງ ແມ່ຍິງ-ຜູ້ຊາຍ ກໍ່ມີບໍ່ຫຼາຍ. ໃນບາງແຂວງ ເຊັ່ນ ແຂວງຜົ້ງສາລີ, ອຸດົມໄຊ, ຫົວພັນ, ຄຳມ່ວນ, ສາລະວັນ, ເຊກອງ ແລະ ອັດຕະປື[31] ຈະເຫັນວ່າ ອັດຕາການປະລະໂຮງຮຽນມີສູງກວ່າອັດຕາສະເລ່ຍລະດັບປະເທດ.

ສາເຫດຂອງການບໍ່ເຂົ້າໂຮງຮຽນ, ບໍ່ມາໂຮງຮຽນ ແລະ ປະລະການຮຽນ ມີດັ່ງຕໍ່ໄປນີ້:

1. ໂຮງຮຽນຈຳນວນຫຼາຍກວ່າເຄິ່ງໜຶ່ງຍັງເປັນໂຮງຮຽນມູນລະປະຖົມ ຫຼື ມີຄູສອນບໍ່ພຽງພໍ ຫຼື ທັງເປັນໂຮງ ຮຽນມູນລະປະຖົມ

26 ຕົວເລກສະຖິຕິທີ່ກ່ຽວກັບສິ່ງອຳນວຍຄວາມສະດວກດ້ານໂຮງຮຽນແມ່ນເອົາມາຈາກ MOE (2008a).

27 ເບິ່ງເອກະສານກອງປະຊຸມປຶກສາຫາລືສາກົນ "ການສຶກສາເພື່ອໝົດທຸກຄົນ" ຈອມທຽນ, ປະເທດໄທ, 1990.

28 ແຫຼ່ງຂໍ້ມູນ: ກະຊວງ ສຶກສາທິການ (2008a); ກະຊວງ ສຶກສາທິການ(2008b) ໜ້າ. 28.

29 ບົດລາຍງານ LECS3 ສະເໜີອັດຕາການເຂົ້າຮຽນ ແບ່ງຕາມໝວດພາສາ. ອີງຕາມ: GOLUNDP (2008).

30 ແຫຼ່ງຂໍ້ມູນ: MultiIndicator Cluster Survey of 2006 [MICS3 – GOL (2007b)].

31 ຕົວເລກທີ່ແຕກຕ່າງກັນໃນວັກນີ້ແມ່ນເປັນຂອງປີຕ່າງກັນ ເພາະວ່າ ຂໍ້ມູນທັງໝົດແມ່ນບໍ່ໄດ້ເກັບພ້ອມກັນທຸກໆປີ ແຫຼ່ງຂໍ້ມູນ: ກະຊວງສຶກສາ (2008a).

**ຮູບສະແດງ 2 6: ອັດຕາສ່ວນຂອງບ້ານທີ່ເຂົ້າເຖິງນ້ຳສະອາດ ແລະ ປອດໄພໃນແຕ່ລະແຂວງ ໃນປີ 2005.**




***ແຫຼ່ງຂໍ້ມູນ :*** *ຄິດໄລ່ຈາກການສຳຫຼວດພົນລະເມືອງ ແລະ ທີ່ຢູ່ອາໄສ ປີ 2005 (GOL (2006a).*

ແລະ ທັງຂາດຄູສອນ (ເອີ້ນວ່າໂຮງຮຽນປະຖົມບໍ່ສົມບູນ). ເຖິງແມ່ນວ່າຕົວເລກຈຳ ນວນໂຮງຮຽນມູນລະປະຖົມ ຈະຄ່ອຍໆຫຼຸດລົງໃນແຕ່ລະໄລຍະເວລາກໍ່ຕາມ, ແຕ່ໃນປີ 2004-05 ຈຳນວນໂຮງຮຽນດັ່ງກ່າວ ກໍ່ຍັງກວມເອົາ 57% ຂອງຈຳນວນໂຮງຮຽນທັງໝົດໃນທົ່ວປະເທດ. ຂໍ້ມູນດ້ານ ການສຶກສາຂອງແຂວງ ໄດ້ສະແດງໃຫ້ເຫັນວ່າ ອັດຕາການປະລະໂຮງຮຽນ ແລະ ຈຳນວນໂຮງຮຽນມູນລະປະຖົມ ມີສາຍກ່ຽວພັນກັນຢ່າງສະໜິດແໜ້ນ (ຮູບສະແດງ 2.5). ດັ່ງນັ້ນ, ການເພີ່ມການລົງທຶນເຂົ້າໃນການກໍ່ສ້າງໂຮງຮຽນ ແລະ ຈັດຫາຄູສອນ ຈຶ່ງຖືເປັນວຽກງານບູລິມະສິດຂອງລັດຖະບານ (ລາຍລະອຽດເພີ່ມເຕີມໃຫ້ເບິ່ງ ບົດທີ 6).

2. ປະມານ 20% ຂອງຈຳນວນບ້ານທັງໝົດຍັງບໍ່ມີໂຮງຮຽນ. ເຖິງແມ່ນວ່າບໍ່ຈຳເປັນຕ້ອງໃຫ້ມີໂຮງຮຽນໃນທຸກໆບ້ານກໍ່ຕາມແຕ່ຫຼາຍບ້ານທີ່ນອນໃນ 20% ນັ້ນກໍ່ມີຄວາມຈຳເປັນຕ້ອງໃຫ້ມີໂຮງຮຽນ. ບັນຫານີ້ເປັນ ສິ່ງທີ່ມີຄວາມຈຳເປັນໂດຍສະເພາະຢ່າງຍິ່ງ ກໍ່ແມ່ນເພື່ອໃຫ້ການສຶກສາ ແກ່ນັກຮຽນຍິງ ພ້ອມທັງຄວາມປອດໄພໃຫ້ ແກ່ພວກເຂົາ ຊຶ່ງຖືເປັນສິ່ງທີ່ສຳຄັນເໜືອກວ່າສິ່ງອື່ນໃດ.

3. ສິ່ງອຳນວຍຄວາມສະດວກຢູ່ໃນໂຮງຮຽນ: ໜ້ອຍກວ່າ 25% ຂອງໂຮງຮຽນປະຖົມທັງໝົດມີລະບົບນ້ຳປະປາ ແລະ ລະບົບສຸຂະນາໄມ. ການຂາດເຂີນສິ່ງອຳນວຍຄວາມສະດວກດັ່ງກ່າວ ແມ່ນບັນຫາໜຶ່ງທີ່ເຮັດໃຫ້ນັກຮຽນ ໂດຍສະເພາະແມ່ນນັກຮຽນຍິງບໍ່ໄປໂຮງຮຽນ.

4. ຈຳນວນຄູສອນທີ່ຮູ້ສອງພາສາແມ່ນມີໜ້ອຍ: ຍ້ອນແນວນັ້ນຈຶ່ງເຮັດໃຫ້ເດັກນ້ອຍທີ່ມາຈາກກຸ່ມຊົນເຜົ່າທີ່ ບໍ່ນຳໃຊ້ພາສາອື່ນນອກຈາກພາສາຂອງຊົນເຜົ່າເຂົາເຈົ້າພົບຄວາມຫຍຸ້ງຍາກໃນການເຂົ້າໃຈບົດຮຽນຢູ່ໃນຫ້ອງຮຽນ.

5. ເຖິງແມ່ນວ່າ ໃນມາດຕາທີ 25 ຂອງລັດຖະທຳມະນູນ ໄດ້ຮັບປະກັນສິດທີໃນການໄດ້ຮັບການສຶກສາເພື່ອໝົດທຸກຄົນ ແລະດຳລັດວ່າດ້ວຍການສຶກສາພາກບັງຄັບ (ປີ 1996) ໄດ້ລະບຸວ່າ ການສຶກສາຊັ້ນປະຖົມ ຍົກເວັ້ນຄ່າໃຊ້ຈ່າຍທັງໝົດແກ່ໝົດທຸກຄົນກໍ່ຕາມ, ແຕ່ການເຂົ້າໂຮງຮຽນປະຖົມ ກໍ່ຍັງບໍ່ໄດ້ຍົກເວັ້ນຄ່າຮຽນທັງໝົດ. ຄາດຄະເນວ່າ ອັດຕາການປະລະໂຮງຮຽນ ຫຼື ການບໍ່ມາໂຮງຮຽນມີເຖິງ 4-5% ນັ້ນແມ່ນເນື່ອງມາຈາກປັດໄຈດ້ານອື່ນຫຼາຍກວ່າສາເຫດທີ່ບໍ່ມີໂຮງຮຽນ[32].

ການທີ່ສະເລ່ຍປີການສຶກສາມີພຽງແຕ່ 4.2 ປີ (4.8 ສຳລັບຜູ້ຊາຍ ແລະ 3.5 ສຳລັບ ແມ່ຍິງ)[33] ຄືແນວນີ້ບໍ່ແມ່ນເລື່ອງແປກແຕ່ຢ່າງໃດ.

## ໂພຊະນາການ ແລະ ນ້ຳດື່ມ

ການເປັນຄົນມີສຸຂະພາບແຂງແຮງດີມີຄວາມສາມາດເປັນນັກຮຽນທີ່ມີຄວາມສະຫຼາດຫຼັກແຫຼມ, ເປັນແຮງງານທີ່ມີຄຸນນະພາບ, ມີຄວາມມຸ່ງໝັ້ນ ແລະ ສາມາດປະຕິບັດໜ້າທີ່ວຽກງານຕ່າງໆໃນຊີວິດປະຈຳວັນໄດ້ດີກວ່າ. ນອກຈາກນັ້ນ, ສຸຂະພາບດີ ຍັງແມ່ນປັດໄຈພື້ນຖານສຳຄັນສຳລັບຄົນຜູ້ໜຶ່ງເພື່ອປະຕິບັດບົດບາດຢ່າງກວ້າງຂວາງຢູ່ໃນສັງຄົມ. ຄຽງຄູ່ກັນນັ້ນ, ພື້ນຖານທາງດ້ານໂພຊະນາການ ກໍ່ແມ່ນປັດໄຈສຳຄັນໃນບັນດາປັດໄຈອື່ນໆທີ່ຄົນເຮົາຕ້ອງການ.



ການຫານ້ຳມາໃຊ້ບໍ່ຄວນເປັນສິ່ງທີ່ຫຍຸ້ງຍາກລຳບາກ

ຈາກການສຳຫຼວດດ້ານການຊົມໃຊ້ ແລະ ການໃຊ້ຈ່າຍຂອງຄົວເຮືອນໃນ ສປປ ລາວ ຄັ້ງທີ 3 ປີ 2002-2003 ຈະເຫັນໄດ້ວ່າມີຄົວເຮືອນປະສົບກັບບັນຫາການຂາດສະບຽງອາຫານ 19.8%: ໃນນັ້ນ, 21.5% ແມ່ນຢູ່ເຂດຊົນນະບົດ ແລະ 14.8% ຢູ່ເຂດຕົວເມືອງ[34]. ຜົນການສຶກສາວິໄຈດ້ານຄວາມໝັ້ນຄົງ ແລະ ຄວາມສ່ຽງທາງດ້ານສະບຽງອາຫານຂອງອົງການອາຫານໂລກໄດ້ພົບວ່າ ໃນປີ 2006 ເດັກນ້ອຍທີ່ອາໄສຢູ່ຊົນນະບົດໃນສອງຄົນໃດມີໜຶ່ງຄົນຂາດສານອາຫານ. ນອກຈາກນັ້ນ, ກໍ່ຍັງໄດ້ພົບວ່າ ຈຳນວນແມ່ຍິງໃນກຸ່ມໄວຈະເລີນພັນ ມີນ້ຳໜັກຫຼຸດປົກກະຕິ ກວມເອົາອັດຕາສ່ວນ 12%. ບົດລາຍງານດັ່ງກ່າວ ຍັງໄດ້ລະບຸວ່າ ການມີໂອກາດເຂົ້າເຖິງອາຫານຈາກສັດປ່າ, ເຄື່ອງປ່າຂອງດົງຊະນິດຕ່າງໆ ແລະ ແຫຼ່ງອາຫານທີ່ມີຢູ່ໃນນ້ຳຫຼຸດໜ້ອຍລົງ ແມ່ນບັນຫາສຳຄັນທີ່ເຮັດໃຫ້ເກີດມີສະພາບການຂາດສານອາຫານ. ປະຊາຊົນໃນກຸ່ມເຜົ່າພາສາເອົ້າຈີນ-ຕິເບດແມ່ນກຸ່ມໄດ້ຮັບຜົນກະທົບຮ້າຍແຮງທີ່ສຸດຈາກການຂາດສານອາຫານ (62%), ຖັດມາກໍ່ແມ່ນ ເຜົ່າໃນ

32 ກະຊວງສຶກສາ (2008a), ໜ້າ 18
33 ການສຳຫຼວດພົນລະເມືອງ 2005 (GOL 2006a).
34 ເບິ່ງການຄິດໄລ່ໂດຍ Richter, van der Weide ແລະ Souksavath (2005) ອີງໃສ່ຂໍ້ມູນ ການຊົມໃຊ້ ແລະ ການໃຊ້ຈ່າຍ ຂອງຄົວເຮືອນຢູ່ລາວ.



ພື້ນຖານໂຄງລ່າງຕະຫລາດທີ່ດີຊ່ວຍສ້າງລາຍຮັບ ແລະ ພາໃຫ້ສຸຂະພາບດີຂຶ້ນ

**ຕາຕະລາງ 2.3: ການຈັດລຳດັບຂອງປະເທດໃນກຸ່ມອາຊຽນຕາມດັດຊະນີ HDI, GDI ແລະ HPI**

| ປະເທດ | ອັນດັບ HDI | ອັນດັບ GDI | ອັນດັບ HPI |
|---|---|---|---|
| ບຣູນາຍ ດາຣູຊາລາມ | 30 | 31 | n.a. |
| ກຳປູເຈຍ | 131 | 114 | 85 |
| ອິນໂດເນເຊຍ | 107 | 94 | 47 |
| **ສປປ ລາວ** | 130 | 115 | 70 |
| ມາເລເຊຍ | 63 | 58 | 16 |
| ມຽນມາ | 132 | n.a. | 52 |
| ຟີລິບປິນ | 90 | 77 | 37 |
| ສິງກະໂປ | 25 | n.a. | 7 |
| ໄທ | 78 | 71 | 24 |
| ຕີມໍແລັດສເຕ | 150 | n.a. | 95 |
| ຫວຽດນາມ | 105 | 91 | 36 |

***ແຫຼ່ງຂໍ້ມູນ:*** *ອົງການສະຫະປະຊາຊາດເພື່ອການພັດທະນາ (2007a); n.a. ໝາຍວ່າບໍ່ມີຂໍ້ມູນ; ອີງຕາມຂໍ້ມູນເກົ່າປີ 2005. ຈຳນວນປະເທດກຸ່ມຕົວແທນທີ່ນຳມາປຽບທຽບແຕ່ລະຕົວຊີ້ບອກແມ່ນແຕກໂຕນກັນ.*

ໝວດພາສາ ມອນ-ຂະແມ (56%), ມົ້ງ-ອິວມຽນ (54%) ແລະ ລາວ-ໄຕ (42%)[35]. ຈາກຂໍ້ມູນ ສະຖິຕິ ຊີ້ໃຫ້ເຫັນວ່າ ການເຕີບໃຫຍ່ຂະຫຍາຍໂຕໄວຂອງເສດຖະກິດໃນຊຸມປີຜ່ານມານີ້ ໄດ້ນຳເອົາຜົນປະໂຫຍດພຽງເລັກໜ້ອຍ ມາສູ່ ປະຊາຊົນສ່ວນຫຼາຍທີ່ອາໄສຢູ່ໃນເຂດຊົນນະບົດ, ໂດຍສະເພາະກໍ່ແມ່ນ ພວກທີ່ອາໄສຢູ່ໃນເຂດຫ່າງໄກສອກຫຼີກ.

ຂໍ້ມູນຈາກການສຳຫຼວດສຸຂະພາບແມ່ ແລະ ເດັກ ຄັ້ງທີ 3 (MICS-3) ຂອງປີ 2006 ສະແດງໃຫ້ເຫັນວ່າ ເດັກທີ່ມີອາຍຸ 0-5 ປີ 37.9% ມີນ້ຳໜັກຫຼຸດກຳນົດ, 41.2% ເຕີບໂຕບໍ່ຖືກກັບເກນປົກກະຕິ, ແລະ 7.4% ມີສຸຂະ ພາບຈ່ອຍຜອມເຫຼືອງ[36]. ບັນຫາເດັກນ້ອຍມີນ້ຳໜັກຫຼຸດກຳນົດ ແລະ ຈະເລີນເຕີບໂຕ ບໍ່ຖືກກັບເກນປົກກະຕິນີ້ແມ່ນເກີດມີກັບເດັກນ້ອຍແມ່ຍິງຫຼາຍກວ່າເດັກນ້ອຍຜູ້ຊາຍ. ຢູ່ໃນເຂດຊົນນະບົດ, ເດັກນ້ອຍໃນກຸ່ມຊົນເຜົ່າທີ່ນອນຢູ່ໃນໝວດພາສາອື່ນໆ ຈະມີນ້ຳໜັກຫຼຸດ, ຈະເລີນເຕີບໂຕຜິດປົກກະຕິ ແລະ ມີຮ່າງກາຍຈ່ອຍຜອມຫຼາຍ ເວັ້ນເສຍແຕ່ເດັກນ້ອຍຢູ່ໃນກຸ່ມຊົນເຜົ່າໝວດພາສາລາວ-ໄຕ. ສຸດທ້າຍ, ຈະເຫັນໄດ້ວ່າຈຳນວນເດັກນ້ອຍບໍ່ສົມບູນ ກໍ່ຄືມີນ້ຳໜັກຫຼຸດກຳນົດຈະເລີນເຕີບໂຕຊ້າ ແລະ ມີຮ່າງກາຍຈ່ອຍຜອມເຫຼືອງ ແມ່ນມີຫຼາຍຢູ່ໃນເຂດຊົນນະບົດໂດຍສະເພາະໃນຄອບຄົວທີ່ແມ່ມີລະດັບການສຶກສາຕ່ຳ /ມີລາຍຮັບຕ່ຳ.

ນ້ຳດື່ມບໍ່ສະອາດ ເປັນສາຍເຫດໃຫ້ເກີດມີການຂາດສານອາຫານ ແລະ ການເສຍຊີວິດ, ຍ້ອນວ່າສິ່ງເປື້ອນເປິຕ່າງໆໄປທຳລາຍທາດ

35 ໂຄງການອາຫານໂລກ, ໜ້າ 91.
36 ນ້ຳໜັກຫຼຸດເກນປົກກະຕິ: ລວງສູງບໍ່ສົມສ່ວນກັບອາຍຸ; ຄວາມສູງ: ລວງສູງບໍ່ສົມສ່ວນກັບອາຍຸ; ນ້ຳໜັກ: ນ້ຳໜັກບໍ່ສົມສ່ວນກັບລວງສູງ; ປີທີ່ລາຍງານ: 2006; ເບິ່ງ ລັດຖະບານລາວ (2007b), ໜ້າ 25-26

**ຮູບສະແດງ 2.7: ອັດຕາການຕາຍຂອງເດັກແດງໃນປີ 1995 ແລະ ປີ 2005 ໃນແຕ່ລະແຂວງ**




**ແຫຼ່ງຂໍ້ມູນ:** ການສຳຫຼວດພົນລະເມືອງ ແລະ ທີ່ຢູ່ອາໄສ ປີ 1995 ແລະ 2005.

ສານອາຫານທີ່ຄົນເຮົາບໍລິໂພກບໍ່ໃຫ້ເຫຼືອຢູ່ໃນຮ່າງກາຍ. ນອກຈາກນັ້ນ, ສິ່ງເປື້ອນເປິດັ່ງກ່າວ ຍັງສາມາດເຮັດໃຫ້ຄົນເຮົາເສຍຊີວິດໄດ້. ດັ່ງນັ້ນ, ນ້ຳດື່ມສະອາດ ຈຶ່ງແມ່ນປັດໄຈໜຶ່ງທີ່ມີຄວາມສຳຄັນໃຫ້ແກ່ການປ້ອງກັນສຸຂະພາບຂອງຄົນເຮົາ. ໃນປະຈຸບັນນີ້, ທາງເລືອກໃນການອະນາໄມໃຫ້ນ້ຳດື່ມສະອາດ ແລະ ມີລາຄາຖືກມີຢູ່ຫຼາຍທາງໂດຍການນຳໃຊ້ ພະລັງງານຈາກແສງອາທິດ (ລາຍລະອຽດເບິ່ງ http://www.sodis.ch). ຢູ່ ສປປ ລາວ, ໃນປີ 2005 ມີພົນລະເມືອງປະມານ 35% ໄດ້ດື່ມນ້ຳສະອາດທີ່ມີຄວາມປອດໄພ ເມື່ອທຽບໃສ່ປີ 1995 ທີ່ມີພຽງ 15%. ອັນນີ້ຖືວ່າ ເປັນຕົວເລກທີ່ບົ່ງບອກເຖິງຄວາມສຳເລັດເຖິງແມ່ນວ່າ ໃນຫຼາຍຂົງເຂດພື້ນທີ່ຂອງປະເທດ ຍັງມີຕົວເລກທີ່ແຕກໂຕນກັນຫຼາຍຢູ່ກໍ່ຕາມ (ຮູບ 2.6).

## ອັດຕາການຕາຍຂອງເດັກແດງ[37]

ຖ້າຫາກວ່າບຸກຄົນໃດຫາກຢູ່ລອດພາຍຫຼັງເດືອນ ແລະ ປີຕົ້ນໆ ຫຼັງການເກີດກໍ່ມີຄວາມເປັນໄປໄດ້ທີ່ບຸກຄົນໆນັ້ນຈະມີອາຍຸຍືນເພີ່ມຂຶ້ນ. ໃນຄວາມໝາຍແຄບໆ, ອັດຕາການຕາຍຂອງເດັກແດງ (IMR) ແລະ ເດັກນ້ອຍ (CMR) ແມ່ນຕົວຊີ້ບອກສຳຄັນອັນໜຶ່ງສຳລັບສຸຂະພາບຂອງມະນຸດ.

ໃນປີ 1995, ຕົວເລກອັດຕາການຕາຍຂອງເດັກແດງແມ່ນ 104, ສຳລັບປີ 2005 ແມ່ນຫຼຸດລົງມາເປັນ 70 (ຜູ້ຊາຍ: 75 ແລະ ແມ່ຍິງ: 60). ອີງໃສ່ຜົນການສຳຫຼວດດັ່ງກ່າວນັ້ນ, ອາຍຸຍືນສະເລ່ຍເພີ່ມຂຶ້ນຈາກ 51 ປີ ມາ ເປັນ 61 ປີ (ຜູ້ຊາຍ ຈາກ 50 ປີ ໃນປີ 1995 ມາເປັນ 59 ປີ ໃນປີ 2005, ແລະ ແມ່ຍິງ ຈາກ 52 ປີ ມາເປັນ 63 ປີ). ໃນໄລຍະດັ່ງກ່າວ, ອັດຕາການຕາຍຂອງເດັກນ້ອຍຫຼຸດລົງຈາກ 170 ມາເປັນ 97.6. ຕົວຊີ້ບອກດັ່ງກ່າວມີລັກສະນະດີຂຶ້ນ.

ຂໍ້ມູນສະເພາະຂອງແຂວງກ່ຽວກັບອັດຕາການຕາຍຂອງເດັກແດງ ສຳລັບ ປີ 1995 ແລະ ປີ 2005, ດັ່ງທີ່ເຫັນ ໄດ້ໃນຮູບທີ 2.7, ຊີ້ໃຫ້ເຫັນວ່າ ເຖິງແມ່ນວ່າ ໂດຍລວມນັ້ນອັດຕາການຕາຍຂອງເດັກແດງ ຈະມີຄວາມຄືບໜ້າດີຂຶ້ນ, ແຕ່ໃນ 5 ແຂວງໃນຈຳນວນ 17 ແຂວງນັ້ນ ອັດຕາການຕາຍຂອງເດັກແດງ ພັດເພີ່ມຂຶ້ນໃນເວລາດັ່ງກ່າວ ເຊັ່ນ: ແຂວງອຸດົມໄຊ, ຄຳມ່ວນ, ສາລະວັນ, ເຊກອງ ແລະ ອັດຕະປື. ການເພີ່ມຂຶ້ນຂອງອັດຕາການ ຕາຍຂອງເດັກແດງດັ່ງກ່າວ ແມ່ນສັນຍານບົ່ງບອກທີ່ບໍ່ດີ. ພ້ອມດຽວກັນນັ້ນ, ຕົວເລກອັດຕາການຕາຍຂອງເດັກແດງໃນພາກຕ່າງໆຂອງປະເທດກໍ່ແຕກໂຕນກັນຫຼາຍຄອນໃນທົດສະວັດນີ້: ໃນໄລຍະແຕ່ ປີ 1995 ຮອດ 2005 ສຳປະສິດຂອງການປ່ຽນແປງໃນອັດຕາການຕາຍຂອງເດັກແດງເພີ່ມຂຶ້ນເປັນສອງເທົ່າຕົວ. ຄວາມຮ້າຍແຮງຂອງອັດຕາການຕາຍຂອງເດັກແດງຢູ່ ແຂວງ ຄຳມ່ວນ ແລະ ສາລະວັນ ເປັນສິ່ງທີ່ໜ້າວິຕົກຢ່າງຍິ່ງ, ເຂດດັ່ງກ່າວບໍ່ໄດ້ຢູ່ເຂດຫ່າງໄກ. ທ່າອ່ຽງທີ່ເພີ່ມຂຶ້ນດັ່ງກ່າວຮຽກຮ້ອງໃຫ້ມີການເອົາໃຈໃສ່ແກ້ໄຂຢ່າງຮີບດ່ວນ.

37 ບາງນິຍາມ:
ກ. ອັດຕາການຕາຍຂອງເດັກແດງ (IMR)= ຄວາມເປັນໄປໄດ້ຂອງເດັກແດງທີ່ບໍ່ຢູ່ລອດເກີນໜຶ່ງປີຫຼັງເກີດໃໝ່ຕໍ່ເດັກເກີດໃໝ່ 1000 ຄົນ.
ຂ. ອັດຕາການຕາຍຂອງເດັກນ້ອຍ (CMR)= ຄວາມເປັນໄປໄດ້ຂອງເດັກແດງທີ່ບໍ່ຢູ່ລອດເກີນ 5 ປີ ຫຼັງເກີດໃໝ່ຕໍ່ເດັກເກີດໃໝ່1000 ຄົນ.
ຄ. ອາຍຸຍືນສະເລ່ຍ = ຄວາມເປັນໄປໄດ້ຂອງຄົນຜູ້ໜຶ່ງ ທີ່ມີຊີວິດຢູ່ລອດຫຼັງຈາກເກີດມາເປັນຄົນ.

ຮູບສະແດງ 2.8: ຄ່າດັດຊະນີການພັດທະນາມະນຸດ ສະເພາະແຕ່ລະແຂວງ, ລະຫວ່າງປີ 2003-2005




***ແຫຼ່ງຂໍ້ມູນ:*** *ຄິດໄລ່ຕາມຂໍ້ມູນທີ່ໄດ້ຮັບຈາກການສຳຫຼວດພົນລະເມືອງ ແລະ ທີ່ຢູ່ອາໄສ ປີ 2005, ການສຳຫຼວດການໃຊ້ຈ່າຍ ແລະ ການຊົມໃຊ້ຂອງຄົວເຮືອນ ຢູ່ລາວ ຄັ້ງທີ 3 ແລະ ກະຊວງສຶກສາທິການ; ແຜນທີ່ດັ່ງກ່າວແມ່ນເອົາມາຈາກ LaoInfo. ປີ 2005. ນັບແຕ່ນັ້ນມາເຂດພິເສດໄຊສົມບູນໄດ້ຖືກລວມເຂົ້າກັບແຂວງອື່ນ.*

ຮູບສະແດງ 2.9: ດັດຊະນີການພັດທະນາບົດບາດຍິງ-ຊາຍ ແລະ ການພັດທະນາມະນຸດໃນແຂວງຕ່າງໆ, ປີ 2003- 2005




***ແຫຼ່ງຂໍ້ມູນ:*** *ຄິດໄລ່ຕາມຂໍ້ມູນທີ່ໄດ້ຮັບຈາກແຫຼ່ງຂໍ້ມູນດຽວກັນກັບດັດຊະນີການພັດທະນາມະນຸດ (HDI). ໃນທີ່ນີ້, ການຄິດໄລ່ດັດຊະນີການພັດທະນາມະນຸດ (HDI) ແມ່ນບໍ່ໄດ້ລວມເອົາເສັ້ນທາງເຂົ້ານຳ ແລະ ໄດ້ປັບຕົວເລກດ້ານການກະຈາຍລາຍໄດ້ເພື່ອໃຫ້ສາມາດປຽບທຽບໄດ້ກັບດັດຊະນີການພັດທະນາບົດບາດຍິງ-ຊາຍໄດ້ (GDI).*

## *ສະຫຼຸບຫຍໍ້ :*

1. *ສ້າງຄວາມເຂັ້ມແຂງ ແລະ ເພີ່ມທະວີປັດໄຈເບື້ອງການສະໜອງ ເຊັ່ນ ສືບຕໍ່ສ້າງໂຮງຮຽນມູນລະປະ ຖົມໃຫ້ກາຍມາເປັນໂຮງຮຽນປະຖົມສົມບູນ (ອາຄານຮຽນ, ພະນັກງານ ແລະ ວັດຖຸອຸປະກອນ), ສົ່ງເສີມຄູຊົນເຜົ່າ ຫຼື ຮູ້ຫຼາຍພາສາທີ່ຮູ້ຫຼາຍພາສາໄປສອນ, ໃຫ້ທຶນການສຶກສາຢ່າງທົ່ວເຖິງ ແລະ ການຍົກເວັ້ນຄ່າຮຽນ, ອາດຈະຊ່ວຍຍົກລະດັບອັດຕາເຂົ້າຮຽນສຸດທິແລະອັດຕາເຂົ້າຮຽນລວມໃຫ້ສູງຂຶ້ນໄດ້. ລາຍລະອຽດດັ່ງກ່າວໄດ້ລະບຸໄວ້ໃນພາກທີ 6.*

2. *ບັນຫາໂພຊະນາການ ແລະ ສຸຂະພາບຂອງເດັກໃນບັນດາແຂວງທີ່ໄດ້ກຳນົດໄວ້ນັ້ນ (ໂດຍສະເພາະ, ບັນດາແຂວງທີ່ອັດຕາການຕາຍຂອງເດັກແດງເພີ່ມຂຶ້ນ) ຮຽກຮ້ອງໃຫ້ມີການເຂົ້າໄປຊ່ວຍແກ້ໄຂໂດຍດ່ວນ. ໃນປະຈຸບັນນີ້, ມີທາງເລືອກຫຼາຍທາງທີ່ມີຄ່າສິ້ນເປືອງບໍ່ສູງ ແລະ ຄວນນຳໄປຈັດຕັ້ງປະຕິບັດ; ເຊັ່ນ: ຄວນມີການສະໜອງນ້ຳດື່ມສະອາດ ທີ່ມີຄ່າໃຊ້ຈ່າຍຕ່ຳດ້ວຍການນຳໃຊ້ແສງອາທິດຂ້າເຊື້ອພະຍາດທີ່ເຈືອປົນຢູ່ໃນນ້ຳ. ລາຍລະອຽດເບິ່ງ http://www.sodis.ch.*

3. *ການເໜັງຕີງ ຫຼື ປ່ຽນແປງຂອງບັນດາຕົວຊີ້ບອກ ກ່ຽວກັບການພັດທະນາບໍ່ແມ່ນຈະເປັນໄປໃນລວງດຽວກັນໝົດ. ບັນຫາສຳຄັນກໍ່ຄື ພວກເຮົາຕ້ອງເອົາໃຈໃສ່ກວດກາເບິ່ງວ່າ ເປັນຫຍັງຕົວຊີ້ບອກທາງ ດ້ານສັງຄົມບາງຕົວໃນບາງແຂວງ ຈຶ່ງມີທິດໄປໃນທາງທີ່ບໍ່ເພິ່ງປາດຖະໜາຫຼືມີຄວາມຄືບໜ້າໄປໃນດ້ານລົບ.*

## ການປະເມີນການພັດທະນາມະນຸດໂດຍຜ່ານອົງປະກອບຂອງຫຼາຍດັດຊະນີ

ດັດຊະນີການພັດທະນາມະນຸດແມ່ນເຄື່ອງມືໜຶ່ງທີ່ສ້າງຂຶ້ນມາເພື່ອປະເມີນສະຖານະພາບການຢູ່ດີກິນດີຂອງມວນມະນຸດ. ສາມດັດຊະນີທີ່ຮູ້ຈັກກັນດີ (ແລະ ໃຊ້ຄິດໄລ່ໃນທີ່ນີ້) ແມ່ນດັດຊະນີການພັດທະນາມະນຸດ ('HDI'), ດັດຊະນີການພັດທະນາບົດບາດຍິງ-ຊາຍ ('GDI') ແລະ ດັດຊະນີຄວາມທຸກຍາກຂອງມະນຸດ ('HPI'). ດັດຊະນີແຕ່ລະອັນ ແມ່ນປະກອບຂຶ້ນຈາກ 3 ຫາ 4 ຕົວປ່ຽນ. ວິທີລະອຽດຂອງການຄິດໄລ່ດັດຊະນີ ດັ່ງກ່າວສາມາດເບິ່ງໄດ້ໃນເອກະສານຊ້ອນທ້າຍ 2.1.

**ຕາຕະລາງ 2 4: ການຈັດລຳດັບແຂວງຕ່າງໆຕາມດັດຊະນີການພັດທະນາມະນຸດໃນປີ 1995 ແລະ 2005**

| ແຂວງ | ອັນດັບ |
|---|---|
| ນະຄອນຫຼວງວຽງຈັນ | ຄືງທີ່ (1,1) |
| ແຂວງວຽງຈັນ | ຄືງທີ່ (1,1) |
| ຈຳປາສັກ | ຫຼຸດລົງ (3,4) |
| ໄຊຍະບູລີ | ດີຂຶ້ນ (4,3) |
| ສະຫວັນນະເຂດ | ຫຼຸດລົງ (5,9) |
| ຄຳມ່ວນ | ຫຼຸດລົງ (6,12) |
| ບໍລິຄຳໄຊ | ດີຂຶ້ນ (7,5) |
| ຊຽງຂວາງ | ດີຂຶ້ນ (8,6) |
| ສາລະວັນ | ຫຼຸດລົງ (9,16) |
| ອັດຕະປື | ຫຼຸດລົງ (10,13) |
| ຫຼວງພະບາງ | ດີຂຶ້ນ (11,7) |
| ຫົວພັນ | ດີຂຶ້ນ (12,10) |
| ອຸດົມໄຊ | ຫຼຸດລົງ (13,15) |
| ບໍ່ແກ້ວ | ດີຂຶ້ນ (14,11) |
| ເຊກອງ | ຫຼຸດລົງ (15,16) |
| ຜົ້ງສາລີ | ຫຼຸດລົງ (16,17) |
| ຫຼວງນ້ຳທາ | ດີຂຶ້ນ (17,14) |

***ແຫຼ່ງຂໍ້ມູນ:*** *ຄິດໄລ່ຈາກຂໍ້ມູນການສຳຫຼວດພົນລະເມືອງ ປີ 1995 ແລະ 2005 (GOL (1997), GOL (2006a)), ລັດຖະບານ ສປປ ລາວ (1999), (2004) ແລະ ກະຊວງສຶກສາທິການ. ໃນທີ່ນີ້, ໄດ້ຄິດໄລ່ດັດຊະນີການພັດທະນາມະນຸດ (HDI) ໂດຍບໍ່ໄດ້ລວມເອົາເສັ້ນທາງເຂົ້ານຳ ແລະ ມີການປັບຕົວເລກດ້ານການກະຈາຍລາຍໄດ້ ເພື່ອໃຫ້ສາມາດປຽບທຽບໄດ້ກັບດັດຊະນີການພັດທະນາບົດບາດຍິງ-ຊາຍ(GDI).*

## ດັດຊະນີການພັດທະນາມະນຸດ: ການສົມທຽບລະດັບສາກົນ.

ເຖິງແມ່ນວ່າ ໃນໄລຍະສອງສາມປີທີ່ຜ່ານມານີ້, ອັນດັບການພັດທະນາມະນຸດຂອງລາວ ຈະໄດ້ຮັບການປັບປຸງໃຫ້ດີຂຶ້ນກໍ່ຕາມ, ແຕ່ຖ້າທຽບໃສ່ພາຍໃນປະເທດອາຊຽນແລ້ວ ອັນດັບດັ່ງກ່າວເກືອບວ່າຢູ່ອັນດັບທ້າຍ (ເບິ່ງຕາຕະລາງ 2.3).

## ການສົມທຽບດັດຊະນີການພັດທະນາມະນຸດຢູ່ບັນດາແຂວງຕ່າງໆ

ວິທີການທີ່ໄດ້ນຳໃຊ້ຄິດໄລ່ດັດຊະນີການພັດທະນາມະນຸດລະດັບແຂວງຢູ່ສປປລາວ ໄດ້ອະທິບາຍໄວ້ຢູ່ໃນເອກະສານຊ້ອນທ້າຍ 2. ຈາກນິຍາມມາດຕະຖານນັ້ນ ຈະເຫັນວ່າ ມີຄວາມແຕກຕ່າງສອງປະການດັ່ງລຸ່ມນີ້:

ຄວາມແຕກຕ່າງອັນທີໜຶ່ງ, ສຳປະສິດຄວາມບໍ່ສະເໝີພາບ (Gini) ເຮັດໃຫ້ຕົວປ່ຽນລາຍຮັບມີຄ່າສະເລ່ຍໃນລະດັບກາງ (ຍ້ອນວ່າຢູ່ໃນລະດັບແຂວງ ບໍ່ມີຂໍ້ມູນລາຍຮັບ ເຂົາເຈົ້າຈຶ່ງໄດ້ເອົາຂໍ້ມູນການຊົມໃຊ້ ປ່ຽນແທນຂໍ້ມູນລາຍຮັບ). ບັນຫາດັ່ງກ່າວນີ້ມີຄວາມສຳຄັນ, ເນື່ອງຈາກວ່າ ການກະຈາຍຜົນໄດ້ຮັບທີ່ບໍ່ສະເໝີພາບເຮັດໃຫ້ຜົນກະທົບຂອງລາຍຮັບທີ່ເພີ່ມຂຶ້ນນັ້ນຫຼຸດລົງ.

ຄວາມແຕກຕ່າງອັນທີສອງ, ການເຂົ້າເຖິງດ້ວຍເສັ້ນທາງໄດ້ເອົາລວມເຂົ້າມາເປັນຕົວປ່ຽນທີສີ່, ເນື່ອງຈາກວ່າການຂາດການເຊື່ອມໂຍງ ເປັນຕົ້ນເຫດແຫ່ງຄວາມໂດດດ່ຽວ ຕັດຂາດຈາກພາຍນອກ ແລະ ຄວາມດ້ອຍພັດ ທະນາຂອງຫຼາຍເຂດ, ຫຼາຍແຂວງ ແລະ ກຸ່ມພົນລະເມືອງ[38].

ສຳປະສິດຂອງດັດຊະນີການພັດທະນາມະນຸດໃນລະດັບແຂວງທີ່ໄດ້ຄິດໄລ່ໃນປີ 2003-2005 (ຮູບ 2.8) ໄດ້ສະແດງໃຫ້ເຫັນວ່າ ດັດຊະນີການພັດທະນາມະນຸດມີຄ່າສູງສຸດແມ່ນຢູ່ ນະຄອນຫຼວງວຽງຈັນ ແລະ ມີຄ່າຕ່ຳສຸດຢູ່ ແຂວງ ຜົ້ງສາລີ. ພາບລວມກໍ່ແມ່ນວ່າ ແຂວງທີ່ມີການຕະຫຼາດກ້ວາງຂວາງ ແລະ ມີຄວາມຫຼາກຫຼາຍດ້ານວິຊາຊີບ ຈະມີຄ່າດັດຊະນີການພັດທະນາມະນຸດສູງ ແລະ ກົງກັນຂ້າມ. ຢູ່ໃນອັນດັບທ້າຍຂອງບັນຊີ ລວມມີ ແຂວງເຊກອງ, ອຸດົມໄຊ, ອັດຕະປື ແລະ ຜົ້ງສາລີ.

## ການສົມທຽບບັນດາແຂວງໂດຍອີງໃສ່ຂະໜາດຂອງດັດຊະນີການພັດທະນາມະນຸດ ປີ 1995–1997 ແລະ ປີ 2003–2005

ໃນສູດຄິດໄລ່ທົ່ວໄປ, ດັດຊະນີການພັດທະນາມະນຸດ ແມ່ນການວັດແທກຂໍ້ມູນຈາກຫຼາຍຂະແໜງການ. ດັ່ງ ນັ້ນ, ການປຽບທຽບລະຫວ່າງຂະແໜງການ ອີງຕາມໄລຍະເວລາ ແມ່ນບໍ່ສາມາດເຮັດໄດ້ໃນບົດຄົ້ນຄວ້ານີ້. ເຖິງຢ່າງໃດກໍ່ຕາມ, ຖ້າຫາກມີການກຳນົດບັນດາຫຼັກໝາຍ ໃນລັກສະນະແຕກຕ່າງກັນໄວ້ ການປຽບທຽບດັດຊະນີດັ່ງກ່າວຕາມແຕ່ລະໄລຍະເວລາ ກໍ່ສາມາດເຮັດໄດ້. ໃນຂັ້ນຕອນທຳອິດແມ່ນກຳນົດກຸ່ມຂອງຄ່າສູງສຸດ ແລະ ຄ່າຕ່ຳສຸດຕາມໄລຍະເວລາ. ຂັ້ນຕອນຕໍ່ໄປ, ກຳນົດຫຼັກໝາຍກໍ່ຄື ຄ່າສະເລ່ຍພຶດຊະຄະນິດຂອງຕົວປ່ຽນທີ່ກ່ຽວຂ້ອງຈາກບັນດາແຂວງທີ່ມີຜົນງານສູງສຸດ ແລະ ຕ່ຳສຸດ (ເອກະສານຊ້ອນທ້າຍ 2.1). ຕາຕະລາງ 2.4 ທີ່ສະແດງເຖິງການຈັດອັນດັບດັດຊະນີການພັດທະນາມະນຸດຂອງແຂວງຕ່າງໆ ໃນປີ 1995 ແລະ ປີ 2005 ໄດ້ຊີ້ໃຫ້ເຫັນວ່າການພັດທະນາມະນຸດທີ່ເພີ່ມຂຶ້ນຢ່າງບໍ່ສະໝ່ຳສະເໝີໃນແຂວງຕ່າງໆໄດ້ປ່ຽນລຳດັບດັດຊະນີການພັດທະນາມະນຸດຂອງແຂວງເຫຼົ່ານັ້ນໃນໄລຍະທົດສະວັດຜ່ານມາ[39]. ເຖິງແມ່ນວ່າ ທຸກໆແຂວງຈະມີຄ່າດັດຊະນີການພັດທະນາມະນຸດ ເພີ່ມຂຶ້ນກໍ່ຕາມ, ແຕ່ແຂວງສາລະວັນ, ສະຫວັນນະເຂດ, ບໍ່ແກ້ວ ແລະ ຄຳມ່ວນ ແມ່ນມີຂັ້ນຂອງການຈັດອັນດັບດັດຊະນີຫຼຸດລົງຫຼາຍຂັ້ນ. ອີກເທື່ອໜຶ່ງ, ພວກເຮົາກໍ່ເຫັນໄດ້ ແຈ້ງແລ້ວວ່າ ຜົນການຈັດຕັ້ງປະຕິບັດການພັດທະນາໃນແຕ່ລະແຂວງໃນທົດສະວັດຜ່ານມາ ເປັນໄປແບບບໍ່ສະໝ່ຳສະເໝີກັນ. ຄຳຖາມກໍ່ມີຢູ່ວ່າ ມັນແມ່ນຍ້ອນການເຄື່ອນຍ້າຍຈາກແຂວງໜຶ່ງໄປສູ່ອີກແຂວງໜຶ່ງ ຫຼື ເປັນຍ້ອນຄວາມບົກຜ່ອງໃນການປະຕິບັດງານຂອງພາກລັດ ຫຼື ບໍ່? ຫຼືວ່າ ຍຸດທະສາດທີ່ໃຊ້ເໝາະສົມໃນເຂດໃດໜຶ່ງແຕ່ພັດບໍ່ເໝາະສົມກັບເຂດອື່ນ? ຖ້າດັ່ງ

38 ເບິ່ງ Menon ແລະ Warr (2007) ກ່ຽວກັບຄວາມສຳຄັນຂອງເສັ້ນທາງ ຢູ່ ສປປ ລາວ. ແຜນທີ່ເສດຖະກິດສັງຄົມຍັງສະແດງໃຫ້ເຫັນຫຼາຍບັນຫາກ່ຽວກັບສະພາບຄວາມໂດດດ່ຽວກະແຈກກະຈາຍຢູ່ທົ່ວໄປໃນ ສປປ ລາວ (ເບິ່ງ Messerli *et al* 2008).

39 ຄ່າຂອງດັດຊະນີການພັດທະນາມະນຸດ (HDI) ສຳລັບປີ 1995 ແລະ 2005 ສາມາດເບິ່ງໄດ້ໃນເອກະສານຊ້ອນທ້າຍກ່ຽວກັບຂໍ້ມູນ.

**ກ່ອງ 2.3: ຢູ່ໃນ ສປປ ລາວ ມີຄວາມສະເໝີພາບດ້ານບົດບາດຍິງ-ຊາຍບໍ່?**

ການສົມທຽບດັດຊະນີການພັດທະນາບົດບາດຍິງ-ຊາຍ ແລະ ດັດຊະນີການພັດທະນາມະນຸດ ຊີ້ໃຫ້ເຫັນວ່າ ຢູ່ໃນ ສປປ ລາວ ບໍ່ປະກົດມີການແບ່ງແຍກດ້ານບົດບາດຍິງ-ຊາຍ. ເຖິງຢ່າງໃດກໍດີ, ໃນເວລາອະທິບາຍ ຄວາມໝາຍດັດຊະນີການພັດທະນາບົດບາດຍິງ-ຊາຍ ຄວນເຂົ້າໃຈວ່າ ດັດຊະນີການພັດທະນາບົດບາດຍິງ-ຊາຍ ບໍ່ແມ່ນການວັດແທກຜົນງານຂອງຜູ້ຊາຍທຽບໃສ່ແມ່ຍິງ ທາງດ້ານຂະໜາດການພັດທະນາມະນຸດ, ແຕ່ ມັນແມ່ນດັດຊະນີການພັດທະນາມະນຸດ ທີ່ພິຈາລະນາເຖິງບັນຫາບົດບາດຍິງ-ຊາຍ. ດັດຊະນີສຳລັບຕົວປ່ຽນແຕ່ລະຕົວ ແມ່ນໄດ້ຄິດໄລ່ຕ່າງຫາກ ລະຫວ່າງ ແມ່ຍິງ ແລະ ຜູ້ຊາຍ. ກ່ອນອື່ນ ແມ່ນຄິດຈາກນ້ຳໜັກຂອງພົນລະເມືອງອີງຕາມເພດ, ຈາກນັ້ນ ຈຶ່ງສັງລວມເອົາດັດຊະນີທັງສອງ. ການຄິດໄລ່ດັດຊະນີການພັດທະນາບົດບາດຍິງ-ຊາຍ ຮຽກຮ້ອງໃຫ້ມີຕົວເລກກົງກັນຂ້າມ ເພື່ອພິຈາລະນາເຖິງທ່າອ່ຽງ ໃນຄວາມບໍ່ສະເໝີພາບທີ່ແມ່ຍິງປະສົບບັນຫາຢູ່, ແລະ ສິ່ງນີ້ ມັນແມ່ນອີງປະກອບທີ່ລະອຽດອ່ອນ ຂອງບົດບາດຍິງ-ຊາຍ ຢູ່ໃນດັດຊະນີດັ່ງກ່າວ. ຖ້າແມ່ຍິງບໍ່ມີບັນຫາກັບການຈຳແນກທີ່ສຳຄັນໃນຕົວປ່ຽນທີ່ໄດ້ຄັດເລືອກເຊັ່ນ: ການອ່ານອອກຂຽນເປັນ, ການເຂົ້າຮຽນໂຮງຮຽນປະຖົມ, ອັດຕາຄ່າຈ້າງງານ, ການມີສ່ວນຮ່ວມໃນການເຮັດວຽກງານ ຫຼື ການມີ ອາຍຸຍືນ, ດັດຊະນີການພັດທະນາບົດບາດຍິງ-ຊາຍ ກໍ່ຈະບໍ່ແຕກຕ່າງ ຈາກດັດຊະນີການພັດທະນາມະນຸດ ຫຼາຍພໍປານໃດ.

ຄວາມບໍ່ສະເໝີພາບທາງດ້ານບົດບາດຍິງ-ຊາຍ ມີຫຼາຍແງ່ມຸມກວ່າ ທີ່ດັດຊະນີການພັດທະນາບົດບາດຍິງ-ຊາຍ (GDI). ຕົວຢ່າງ: ໃນທຸກລະດັບການສຶກສາ, ເດັກນ້ອຍແມ່ຍິງ ແມ່ນມີຄວາມດ້ອຍກວ່າເດັກນ້ອຍຜູ້ຊາຍ. ອີງຕາມຜົນຂອງການສຳຫຼວດ, ໃນຕະຫຼາດການແຮງງານ, ເດັກນ້ອຍແມ່ຍິງມີໂອກາດສູງ ທີ່ຈະບໍ່ໄດ້ເຮັດວຽກທີ່ມີຄ່າຈ້າງແຮງງານສູງ ແລະ ເຂົາເຈົ້າກໍ່ຍັງມີໂອກາດບີບຕົວຂຶ້ນໃນດ້ານໜ້າທີ່ການງານໄດ້ຊ້າກວ່າ. ມາດຕະການສົ່ງເສີມບົດບາດຍິງ-ຊາຍ (GEM) ໄດ້ພິຈາລະນາບັນດາປັດໄຈດັ່ງກ່າວ, ແຕ່ຄວາມຮຽກຮ້ອງຕ້ອງການດ້ານຂໍ້ມູນ ບໍ່ສາມາດອະນຸຍາດໃຫ້ເຮັດການຄິດໄລ່ໄດ້ໃນບົດສຶກສາວິໄຈນີ້. ໃນຂະນະທີ່ ກົດໝາຍ ຢູ່ ສປປ ລາວ ໃຫ້ສິດເສລີພາບພໍສົມຄວນໃນການຈ້າງແຮງງານແມ່ຍິງ, ການລາພັກໃນຍາມຫຼັງເກີດລູກ, ໂອກາດໃນການເຂົ້າຝຶກອົບຮົມ ແລະ ອື່ນໆ.., ສິ່ງດັ່ງກ່າວ ມີຜົນກະທົບເລັກໜ້ອຍຢູ່ພາຍນອກ (ຫຼື ພາຍໃນ) ໃນຂົງເຂດທາງການ ແລະ ພາກລັດຖະບານ. ມີຫຼັກຖານພຽງເລັກໜ້ອຍ ໄດ້ຊີ້ໃຫ້ເຫັນວ່າ ການຕັດສິນບັນຫາໃນຄົວເຮືອນ ໂດຍສະເພາະແມ່ນ ກ່ຽວກັບບັນຫາການເງິນ, ແມ່ຍິງມັກຈະປຶກສາຫາລືນຳຜູ້ຊາຍ ແຕ່ກົງກັນຂ້າມ ເວລາທີ່ຜູ້ຊາຍມີບັນຫານັ້ນ ພັດບໍ່ຄ່ອຍຈະປຶກສາກັບແມ່ຍິງ. ຍິ່ງໄປກວ່ານັ້ນ, ໃນຕຳແໜ່ງຂັ້ນສູງຂຶ້ນໄປ (ອາດເປັນທາງດ້ານການເມືອງ ຫຼື ດ້ານເສດຖະກິດ), ເພດຍິງທີ່ເປັນຕົວແທນ ແມ່ນມີໜ້ອຍຫຼາຍ.

ການສຳຫຼວດພົນລະເມືອງ ແລະ ທີ່ຢູ່ອາໄສ ປີ 2005 ພົບວ່າ ການອອກແຮງງານໃນຄອບຄົວທີ່ບໍ່ໄດ້ຄ່າແຮງງານ ປະເພດທີ່ມີສິດທິພິເສດໜ້ອຍຢູ່ໃນກຳລັງແຮງງານກວມເອົາ 52% ຂອງແຮງງານທີ່ເຮັດວຽກໃຫ້ແກ່ຕົນເອງ ແລະ ສ່ວນໃຫຍ່ແມ່ນແມ່ຍິງ. ອັດຕາສ່ວນຂອງການອອກແຮງງານຂອງແມ່ຍິງຢູ່ໃນຄອບຄົວໂດຍບໍ່ມີຄ່າ ຈ້າງເພີ່ມຂຶ້ນໃນໄລຍະແຕ່ປີ 1995-2005. 'ລູກຈ້າງ' ຜູ້ອອກແຮງງານທີ່ມີສິດທິພິເສດກວມເອົາ 11.7% ຂອງກຳລັງແຮງງານ; ໃນນັ້ນປະມານ 7.3% ເຮັດວຽກນຳລັດ (30% ແມ່ນແມ່ຍິງ) ແລະ 4.4% ເຮັດວຽກກັບພາກເອກະຊົນ (40% ແມ່ນແມ່ຍິງ).

ຂໍ້ມູນຈາກການສຳຫຼວດການຊົມໃຊ້ ແລະ ການໃຊ້ຈ່າຍຂອງຄົວເຮືອນຢູ່ລາວ ຊີ້ໃຫ້ເຫັນວ່າ ກິດຈະກຳສ້າງລາຍຮັບເພີ່ມບວກໃສ່ວຽກເຮືອນ, ໂດຍສະເລ່ຍແລ້ວ ຜູ້ຊາຍໃຊ້ເວລາເຮັດວຽກ 5.8 ຊົ່ວໂມງຕໍ່ມື້, ສ່ວນ ແມ່ຍິງໃຊ້ເວລາເຮັດວຽກ 7 ຊົ່ວໂມງຕໍ່ມື້. ສະເລ່ຍແລ້ວ, ແມ່ຍິງໃຊ້ເວລາ 2 ຊົ່ວໂມງເຄິ່ງເຮັດວຽກເຮືອນ ແລະ ສ່ວນຜູ້ຊາຍໃຊ້ເວລາພຽງແຕ່ 0.6 ຊົ່ວໂມງ. ສະເລ່ຍແລ້ວ, ແມ່ຍິງໃຊ້ເວລາພຽງແຕ່ 0.9 ຊົ່ວໂມງຢູ່ໂຮງຮຽນ ສ່ວນຜູ້ຊາຍໃຊ້ເວລາ 1.3 ຊົ່ວໂມງ. ຢູ່ ສປປ ລາວ, ສະຖານະພາບຂອງແມ່ຍິງ ເມື່ອສົມທຽບໃສ່ຜູ້ຊາຍ ຫຼື ໃນປະເທດອາຊີຕາເວັນອອກສຽງໃຕ້ ເຫັນວ່າ ສູງກ່ວາເມື່ອສົມທຽບໃສ່ແມ່ຍິງໃນອາຊີໃຕ້ ຫຼື ອາຊີຕາເວັນຕົກ ຍ້ອນວ່າ ເຂົາເຈົ້າມີສ່ວນຮ່ວມໃນຕະຫຼາດແຮງງານຫຼາຍກວ່າ. ດັ່ງນັ້ນ, ເຂົາເຈົ້າຈຶ່ງເປັນຜູ້ຄຸ້ມຄອງເງິນໄດ້ດີກວ່າ ແລະ ບໍ່ມີພຶດຕິກຳທາງດ້ານສັງຄົມທີ່ບໍ່ຖືກຕ້ອງທີ່ມີຜົນຕໍ່ຊັບສິນຂອງຝ່າຍຍິງ. ເຖິງຢ່າງໃດກໍ່ຕາມ, ສິ່ງດັ່ງກ່າວນີ້ບໍ່ແມ່ນສິ່ງທີ່ໜ້າເພິ່ງພໍໃຈຍ້ອນວ່າຍັງມີຊ່ອງຫວ່າງຢູ່.

**ແຫຼ່ງຂໍ້ມູນ:** ລັດຖະບານລາວ (2006b), ລັດຖະບານລາວ (2004), ສະຫະພັນແມ່ຍິງລາວ ແລະ GRID (2005)

ນັ້ນ, ເປັນຫຍັງບັນດາແຂວງເຊັ່ນ ແຂວງຄຳມ່ວນ ແລະ ສະຫວັນນະເຂດ ທີ່ຈັດຢູ່ໃນອັນດັບດີຈຶ່ງຕົກອັນດັບລົງມາ? ດັ່ງນັ້ນ, ເພື່ອຕອບຄຳຖາມດັ່ງກ່າວນີ້ ຈຶ່ງຈຳເປັນໃຫ້ມີການສຶກສາວິໄຈ ຢ່າງລະອຽດ.

## ດັດຊະນີການພັດທະນາບົດບາດຍິງ-ຊາຍ

ດັດຊະນີການພັດທະນາບົດບາດຍິງ-ຊາຍ (GDI) ແລະ ດັດຊະນີການພັດທະນາມະນຸດ (HDI) ສຳລັບແຕ່ລະແຂວງໄດ້ສະແດງໃຫ້ເຫັນໃນຮູບ 2.9 (ນິຍາມ: ເອກະສານຊ້ອນທ້າຍ 2.1). ຮູບສະແດງດັ່ງກ່າວໄດ້ຊີ້ໃຫ້ເຫັນ ວ່າເກືອບທຸກແຂວງມີດັດຊະນີການພັດທະນາບົດບາດຍິງ-ຊາຍ ແລະ ດັດຊະນີການພັດທະນາມະນຸດຄ້າຍຄືກັນຫຼາຍ; ແຂວງຈຳນວນໜຶ່ງມີຄ່າດັດຊະນີສູງກວ່າແຂວງອື່ນໆເລັກໜ້ອຍ ແລະ ມີຄ່າຕໍ່ກ່ວາໜ້ອຍໜຶ່ງໃນ ສອງແຂວງ. ແຕ່ຄວາມແຕກໂຕນກັນດັ່ງກ່າວ ມີຄ່າໜ້ອຍຫຼາຍບໍ່ພໍທີ່ຈະໃຫ້ມີຄຳຄິດເຫັນໄດ້. ເຫດຜົນໜຶ່ງທີ່ ສອງດັດຊະນີດັ່ງກ່າວມີຄ່າໃກ້ຄຽງກັນກໍ່ແມ່ນຍ້ອນຂາດຂໍ້ມູນ ກ່ຽວກັບ ລາຍຮັບສະເພາະຂອງແມ່ຍິງ ແລະ ຜູ້ຊາຍ.

## ດັດຊະນີຄວາມທຸກຍາກຂອງມະນຸດ

ຄວາມທຸກຍາກຂອງມະນຸດ ແມ່ນການວັດແທກຄວາມທຸກຍາກທີ່ບໍ່ກ່ຽວຂອງກັບລາຍຮັບ ແລະ ມີຈຸດປະສົງເພື່ອສ່ອງແສງໃຫ້ເຫັນຜົນຂອງການມີລາຍຮັບຕ່ຳຕໍ່ຊີວິດການເປັນຢູ່ຂອງມະນຸດ: ໂດຍສ່ວນໃຫຍ່ແລ້ວ ແມ່ນ ການເສຍຊີວິດ, ສຸຂະພາບບໍ່ແຂງແຮງ ແລະ ຂາດການສຶກສາ. ຮູບທີ 2.10 ສະແດງໃຫ້ເຫັນວ່າ ຄ່າດັດຊະນີ

**ຮູບສະແດງ 2.10: ດັດຊະນີຄວາມທຸກຍາກຂອງມະນຸດ ສຳລັບແຂວງຕ່າງໆ ປີ 2003-2005**




***ແຫຼ່ງຂໍ້ມູນ:*** *ຄືກັນກັບດັດຊະນີການພັດທະນາມະນຸດ. ແຜນທີ່ດັ່ງກ່າວແມ່ນເອົາມາຈາກ LaoInfo, ປີ 2005. ນັບແຕ່ນັ້ນມາເຂດ ພິເສດໄຊສົມບູນ ໄດ້ຖືກລວມເຂົ້າກັບແຂວງອື່ນ.*

**ກ່ອງ 2.4: ການຕິດຕາມການພັດທະນາມະນຸດໃນລະດັບລະອຽດ**

ລະບົບການຕິດຕາມແລະປະເມີນຜົນການພັດທະນາມະນຸດ, ຄວາມທຸກຍາກຫຼືແຜນງານແກ້ໄຂຄວາມທຸກຍາກຫຼືການມີວຽກເຮັດງານທຳໃນປະຈຸບັນແມ່ນການປະເມີນຜົນກ່ອນຫນ້າ ແລະ ພາຍຫຼັງ (ການສຳຫຼວດການໃຊ້ຈ່າຍ ແລະ ການຊົມໃຊ້ຂອງຄົວເຮືອນລາວ, ການສຳຫຼວດພົນລະເມືອງ ແລະ ທີ່ຢູ່ອາໄສ) ແລະການຕິດຕາມທີ່ກົມໄດ້ເຮັດແມ່ນການລາຍງານກ່ຽວກັບລາຍຈ່າຍ.ມີໜ່ວຍງານຕິດຕາມກວດກາການວາງແຜນພັດທະນາເສດຖະກິດ-ສັງຄົມທີ່ຂຶ້ນກັບກະຊວງ ແຜນການ ແລະ ການລົງທຶນ (ຜທ), ແຕ່ຍັງມີຄວາມຕ້ອງ ການຊັບພະຍາກອນທີ່ຈຳເປັນຫຼາຍຢ່າງ ເພື່ອຈັດຕັ້ງປະຕິບັດວຽກງານດັ່ງກ່າວ. ມີຄວາມຈຳເປັນຕ້ອງໄດ້ສ້າງຕັ້ງລະບົບຂໍ້ມູນທີ່ເປັນເອກະພາບ, ສະດວກສະບາຍໃນເວລາໃຊ້ ແລະ ມີຄວາມໂປ່ງໃສ. ຈຸດລິເລີ່ມແມ່ນປັບ ປຸງລະບົບການບັນທຶກຂອງບ້ານ, ຊຶ່ງເປັນບ່ອນເກັບກຳຂໍ້ມູນທີ່ສາມາດສັງລວມໄດ້ສຳລັບຂັ້ນເມືອງ ແລະ ຂັ້ນແຂວງ ແລະ ສາມາດເຊື່ອມໂຍງເຂົ້າກັບລະບົບສະຖິຕິແຫ່ງຊາດໄດ້.

1. ຂໍ້ມູນກ່ຽວກັບຕົວປ່ຽນຕົ້ນຕໍທີ່ເປັນຂໍກຸນແຈ ເຊັ່ນ ແຜນລາຍຈ່າຍ ແລະ ຜົນງານທີ່ສ້າງໄດ້ ຄວນໃຫ້ມີສຳ ລັບແຕ່ລະບ້ານ ແລະ ແຕ່ລະເມືອງ. ບັນຫານີ້ຈະຮັບໃຊ້ຈຸດປະສົງສະໜອງຂໍ້ມູນກັບຄືນໃຫ້ແກ່ບ້ານ ແລະ ເມືອງກ່ຽວກັບຜົນງານ (ຫຼືຂໍ້ຄົງຄ້າງ) ແລະ ແຈ້ງໃຫ້ອົງການຈັດຕັ້ງ ແລະ ປະຕິບັດແຜນການຮັບຊາບ. ຢູ່ປະເທດກຳປູເຈຍ ຂໍ້ມູນທີ່ກະຊວງແຜນການເກັບໄດ້ນັ້ນ (ພາຍໃຕ້ແຜນງານຂອງສະພາຊຸມຊົນ) ເປັນຕົວແບບໜຶ່ງທີ່ສາມາດນຳມາທົດລອງນຳໃຊ້ຢູ່ໃນ ສ ປ ປ ລາວ.

2. ບັນຫາສຳຄັນຄື ຄວນກຳນົດສະຖານະພາບກຳມະສິດທີ່ດິນທຸກຕອນ ນັບທັງທີ່ດິນຂອງເອກະຊົນເປັນເຈົ້າຂອງ ຫຼື ບໍ່ແມ່ນເອກະຊົນເປັນເຈົ້າຂອງ ແລະ ແຈ້ງການໃຫ້ມວນຊົນທົ່ວໄປຮັບຊາບ (ຕົວຢ່າງ ດິນສ່ວນລວມ ທີ່ສ່ວນໜຶ່ງຖືກນ້ຳຖ້ວມ ຫຼື ດິນສ່ວນຫນຶ່ງທີ່ປົກຄຸມດ້ວຍປ່າໄມ້ ຫຼື ດິນເຊື່ອມໂຊມ). ໃນເມື່ອໄດ້ກຳນົດສະຖາ ນະພາບຂອງທີ່ດິນແລ້ວ, ທີ່ດິນດັ່ງກ່າວ ກໍ່ຈະສາມາດນຳໃຊ້ໃຫ້ເກີດຜົນປະໂຫຍດສູງສຸດໄດ້ ໂດຍປາສະ ຈາກຂໍ້ຂັດແຍ່ງລະຫວ່າງພາກສ່ວນຕ່າງໆທີ່ກ່ຽວຂ້ອງ.

3. ການບັນທຶກຢ່າງເປັນລະບົບ ກ່ຽວກັບ ການເກີດ, ການຕາຍ, ການແຕ່ງງານ, ການຖືພາ ແລະ ການເຄື່ອນຍ້າຍຄວນເຮັດຢູ່ໃນລະດັບບ້ານ ແລະ ເມືອງ. ຂໍ້ມູນດັ່ງກ່າວ ມີປະໂຫຍດສຳລັບການຕິດຕາມກວດ ກາການເຄື່ອນເໜັງຂອງພົນລະເມືອງ, ສະພາບຂອງແມ່ຍິງ, ສະພາບດ້ານສຸຂະພາບຂອງຄົວເຮືອນ, ການວາງແຜນຄອບຄົວ ໆລໆ ຊຶ່ງສາມາດເຮັດໄດ້ໂດຍຜ່ານກົນໄກການບໍລິຫານຄຸ້ມຄອງ.

4. ສະຖິຕິຕົ້ນຕໍ ໃນລະດັບບ້ານຕ້ອງນຳອອກເປີດເຜີຍໃຫ້ສາທາລະນະຊົນຮັບຊາບ ຢ່າງກວ້າງຂວາງ ເພື່ອຮັບປະກັນຄວາມໂປ່ງໃສ. ອາດຈະຂຽນຂໍ້ມູນໃສ່ກະດານໃຫຍ່ ແລ້ວຕິດສະແດງໄວ້ຂ້າງນອກຂອງຫ້ອງການບ້ານແຕ່ລະບ້ານ.

ຄວາມທຸກຍາກຂອງມະນຸດຕ່ຳທີ່ສຸດແມ່ນຢູ່ ນະຄອນຫຼວງວຽງຈັນ ແລະ ສູງທີ່ສຸດແມ່ນຢູ່ແຂວງເຊກອງ. ສ່ວນຢູ່ແຂວງຜົ້ງສາລີ, ຫຼວງນ້ຳທາ, ອຸດົມໄຊ, ສາລະວັນ, ເຊກອງ ແລະ ອັດຕະປື ມີຄ່າດັດຊະນີຄວາມທຸກຍາກຂອງມະນຸດສູງ. ແຂວງດັ່ງກ່າວ ມີອັນດັບດັດຊະນີຄວາມທຸກຍາກດ້ານລາຍຮັບສູງ ແລະ ມີດັດຊະນີການພັດທະນາມະນຸດຕ່ຳ. ເຖິງຢ່າງໃດກໍ່ຕາມ, ໃນກໍລະນີຂອງແຂວງຫຼວງນ້ຳທາແມ່ນບໍ່ຄືກັບແຂວງອື່ນໆ. ດັດຊະນີການພັດທະນາມະນຸດຂອງແຂວງດັ່ງກ່າວ ພ້ອມດ້ວຍແຂວງເຊກອງ, ອັດຕະປື ແລະ ຄຳມ່ວນແມ່ນຈັດຢູ່ໃນອັນດັບຕ່ຳກ່ວາ. ຄວນເຂົ້າໃຈວ່າ, ບໍ່ແມ່ນວ່າຕົວຊີ້ບອກການພັດທະນາ ຈະເປັນໄປໃນລວງດຽວກັນໝົດທຸກຢ່າງ.

ຕົວຊີ້ບອກຫຼາຍຕົວ, ນັບທັງຕົວຊີ້ບອກດ່ຽວ ຫຼື ເປັນກຸ່ມ ຕ່າງກໍ່ສະແດງໃຫ້ເຫັນວ່າ ຢູ່ໃນ 6 ແຂວງຄື: ອັດຕະປື, ຜົ້ງສາລີ, ສາລະວັນ, ເຊກອງ, ຫົວພັນ ແລະ ອຸດົມໄຊ ແມ່ນຈັດຢູ່ໃນອັນດັບທີ່ຕ່ຳສຸດຂອງທຸກອັນດັບ.

## *ສະຫຼຸບຫຍໍ້:*

1. *ເປັນການຢ້ຳຄືນອີກວ່າ, ຕົວຊີ້ບອກການພັດທະນາບໍ່ໄດ້ເຄື່ອນເໜັງໄປລະດັບດຽວກັນ ຫຼື ໄປຕາມລວງທີ່ຕ້ອງການໝົດທຸກຢ່າງ. ດັ່ງນັ້ນ, ສິ່ງສຳຄັນກໍ່ຕ້ອງມີລະບົບຕິດຕາມກວດກາຕົວປ່ຽນທັງໝົດເຫຼົ່ານັ້ນໄປ ພ້ອມໆກັນ ແທນທີ່ຈະຕິດຕາມກວດກາແຕ່ໜຶ່ງ ຫຼື ສອງຕົວປ່ຽນເທົ່ານັ້ນ. ຕໍ່ບັນຫາດັ່ງກ່າວນີ້, ຕ້ອງໄດ້ສ້າງລະບົບການຕິດຕາມການພັດທະນາມະນຸດໃນລະດັບທ້ອງຖິ່ນຂຶ້ນ - ເບິ່ງຕາຕະລາງ 2.4. ຖ້າວິໄຈໃຫ້ເລິກເຊິ່ງລົງໄປອີກກໍ່ ຈະເຫັນວ່າ ຄວນມີການລົງທຶນທາງດ້ານສັງຄົມ ໃນຂົງເຂດທີ່ດ້ອຍພັດທະນາກວ່າໃຫ້ຫຼາຍຂຶ້ນ. ນອກຈາກນີ້ ກໍ່ຍັງມີຄວາມຈຳເປັນ ທີ່ຈະຕ້ອງໄດ້ວາງນະໂຍບາຍ ເພື່ອດຶງດູດເອົາການລົງທຶນ ຈາກພາກເອກະຊົນທັງພາຍໃນ ແລະ ຕ່າງປະເທດເຂົ້າໃນຂົງເຂດດັ່ງກ່າວ.*

2. *ຕົວຊີ້ບອກການພັດທະນາມະນຸດຫຼາຍຕົວ ຊີ້ໃຫ້ເຫັນວ່າ ວຽກງານການພັດທະນາມະນຸດໃນ ແຂວງອັດຕະປື, ຜົ້ງສາລີ, ສາລະວັນ, ເຊກອງ, ຫົວພັນ ແລະ ອຸດົມໄຊ ຍັງຫຼ້າຫຼັງກວ່າແຂວງອື່ນໆ.*

## ຂໍ້ສະເໜີແນະຕົ້ນຕໍ

1. ເມື່ອມີບຸກຄົນໃໝ່ເຂົ້າມາກ່ຽວຂ້ອງ ກໍ່ເກີດມີການແກ້ງແຍ່ງແຂ່ງຂັນກັນ ລະຫວ່າງ ຜູ້ນຳໃຊ້ຊັບພະຍາກອນທຳມະຊາດ. ໃນຂະບວນການດັ່ງກ່າວ, ກຸ່ມບໍ່ມີອຳນາດ (ຊາວກະສິກອນ) ບໍ່ສາມາດຫຼີກຫຼ່ຽງການສູນເສຍທາງດ້ານວິຖີການດຳລົງຊີວິດຂອງຕົນໄດ້. ເພື່ອຫຼີກເວັ້ນບັນຫາດັ່ງກ່າວນີ້, ຄວນດຳເນີນການປະເມີນຜົນໂຄງການໃຫ້ລະອຽດເລິກເຊິ່ງ (ປະຈຸບັນມີຄູ່ມືແນະນຳແລ້ວ), ຄວນປຶກສາຫາລືນຳປະຊາຊົນ ແລະ ຮັບຟັງຄຳຄິດເຫັນຈາກປະຊາຊົນ ທີ່ໄດ້ຮັບຜົນກະທົບກ່ອນຈະດຳ

ເນີນການປ່ຽນແປງໃດໆຕໍ່ບັນຫາທີ່ດິນ. ລາຍລະອຽດສະເພາະກວ່ານີ້ແມ່ນ:

ກ. ໂຄງການໃດກໍ່ຕາມ ທີ່ຈະກໍ່ໃຫ້ເກີດການປ່ຽນແປງການນຳໃຊ້ທີ່ດິນຈາກຈຸດປະສົງໜຶ່ງໄປຫາຈຸດປະສົງອື່ນຫຼືປ່ຽນແປງກຳມະສິດທີ່ດິນນັ້ນຕ້ອງມີການປະເມີນຢ່າງຄັກແນ່. ຖ້າວ່າຂະບວນການດັ່ງກ່າວຫາກມີຜົນກະທົບໃນທາງບໍ່ດີຕໍ່ການດຳລົງຊີວິດຂອງປະຊາຊົນ, ການໃຫ້ທາງເລືອກໃນການໃຫ້ການຊົດເຊີຍແກ່ເຂົາເຈົ້າເປັນຕົ້ນການຊົດເຊີຍຕໍ່ທີ່ດິນທີ່ເຂົາເຈົ້າສູນເສຍໄປ, ການສ້າງວຽກເຮັດງານທຳ ຫຼື ທັງສອງຢ່າງຕ້ອງຖືເປັນສິ່ງສຳຄັນ.

ຂ. ຂະບວນການໂອນກຳມະສິດທີ່ດິນຕ້ອງໂປ່ງໃສ ແລະ ມີສ່ວນຮ່ວມຈາກຫຼາຍພາກສ່ວນ. ຄວນຈັດໃຫ້ມີກອງປະຊຸມຂັ້ນບ້ານເພື່ອອະທິບາຍລາຍລະອຽດຂອງໂຄງການ, ການເວນຄືນທີ່ດິນ ແລະ ແຜນການຈັດສັນພູມລຳເນົາໃໝ່. ພ້ອມກັນນີ້ ກໍ່ຄວນຖາມຄຳຄິດເຫັນຂອງປະຊາຊົນກ່ຽວກັບແຜນການຈັດສັນພູມລຳເນົາໃໝ່ດັ່ງກ່າວ. ການເຮັດສັນຍາຈັດສັນພູມລຳເນົາໃຫ້ປະຊາຊົນຕ້ອງເຮັດເປັນລາຍລັກອັກສອນ ແລະ ຕ້ອງກຳນົດອົງການຮັບຜິດຊອບຈັດຕັ້ງປະຕິບັດໃຫ້ແຈ້ງ.

ຄ. ຫຼັງຈາກມີການສຳຫຼວດເບື້ອງຕົ້ນແລ້ວ, ຄວນຕິດຕາມກວດກາ ເພື່ອປະເມີນມາດຕະຖານການເປັນຢູ່ ແລະ ບັນຫາອື່ນທີ່ກ່ຽວຂ້ອງກັບປະຊາຊົນຜູ້ໄດ້ຮັບຜົນກະທົບຢ່າງເປັນປົກກະຕິ ຢ່າງໜ້ອຍປະມານ ສາມປີ.

2. ການວັດແທກ ແລະ ຕິດຕາມມາດຕະຖານການດຳລົງຊີວິດຂອງປະຊາຊົນ, ການເຄື່ອນຍ້າຍຂອງປະຊາຊົນ ແລະ ລາຍລະອຽດຕ່າງໆທີ່ກ່ຽວຂ້ອງໃນລະດັບແຂວງ ແລະ ເມືອງ ແມ່ນມີຄວາມສຳຄັນເພື່ອຕີລາຄາສະພາບຄວາມເປັນຈິງໃນລະດັບທ້ອງຖິ່ນ. ລັດຖະບານ ຄວນເກັບກຳຂໍ້ມູນກ່ຽວກັບຕົວຊີ້ບອກສຳຄັນ (ເຊັ່ນ: ການຫວ່າງງານ, ອັດຕາຄ່າຈ້າງງານ, ລາຄາສະບຽງອາຫານຢູ່ທ້ອງຖິ່ນ, ການເຄື່ອນຍ້າຍເຂົ້າ/ອອກຂອງພົນລະເມືອງ, ຕົວປ່ຽນດ້ານພົນລະເມືອງ ແລະ ອື່ນໆ) ໂດຍຜ່ານການຄຸ້ມຄອງບໍລິຫານ ຫຼື ວິທີ ການອື່ນທີ່ເໝາະສົມ. ຂໍ້ມູນຕ່າງໆທີ່ເກັບໄດ້ໃນລະດັບນີ້ ຄວນເຊື່ອມຕໍ່ເຂົ້າຫາລະບົບສະຖິຕິແຫ່ງຊາດ. ຄວນຖືເອົາວຽກງານສ້າງຄວາມເຂັ້ມແຂງດ້ານລະດັບຄວາມສາມາດເພື່ອເກັບກຳແລະສັງລວມປຸງແຕ່ງຂໍ້ມູນສະຖິຕິໃນລະດັບທ້ອງຖິ່ນເປັນບູລິມະສິດສຳຄັນສູງ. ຕໍ່ກັບບັນຫາດັ່ງກ່າວ, ຄວນມີການຈັດສັນກຸ່ມບ້ານຄືນໃໝ່ ແລະ ສະໜອງການຝຶກອົບຮົມໃຫ້ພະນັກງານຂັ້ນເມືອງ ແລະ ຂັ້ນບ້ານກ່ຽວກັບການເກັບຂໍ້ມູນສຳຄັນ ແລະ ຄວນມີງົບປະມານພຽງພໍເພື່ອເຮັດວຽກດັ່ງກ່າວ.

3. ມີຄວາມຈຳເປັນຕ້ອງຕອບສະໜອງເງື່ອນໄຂອັນຈຳເປັນຊຶ່ງໃນນັ້ນກໍ່ແມ່ນລວມທັງຕຶກອາຄານໃຫ້ແກ່ໂຮງຮຽນປະຖົມທັງໝົດ (ນັບທັງສິ່ງຈູງໃຈນັກຮຽນ), ການສະໜອງອຸປະກອນການສິດສອນ ແລະ ສະໜອງຄູສອນ. ລາຍລະອຽດຂອງແຕ່ລະບັນຫາໄດ້ນຳສະເໜີຢູ່ໃນພາກທີ 6.

4. ໂພຊະນາການ ແລະ ສຸຂະພາບເດັກໃນບັນດາແຂວງຕ່າງໆທີ່ໄດ້ກຳນົດ (ໂດຍສະເພາະແຂວງທີ່ມີເດັກແດງເສຍຊີວິດເພີ່ມຂຶ້ນ) ແມ່ນຮຽກຮ້ອງໃຫ້ມີຄວາມເອົາໃຈໃສ່ແກ້ໄຂດ່ວນ. ເນື່ອງຈາກເປັນທີ່ຮູ້ກັນດີວ່າ ນ້ຳດື່ມສະອາດສາມາດຮັບປະກັນໃຫ້ເດັກນ້ອຍ ສາມາດຮັກສາຄຸນຄ່າຂອງອາຫານທີ່ກິນເຂົ້າໄປໃນຮ່າງກາຍໄດ້ດີ. ສະນັ້ນ, ຈຶ່ງຄວນຖືເອົາປັດໄຈດັ່ງກ່າວນີ້ມາເປັນບູລິມະສິດສຳຄັນ. ແນ່ນອນ, ນອກຈາກຄຸນນະພາບຂອງນ້ຳຈະມີຄວາມສຳຄັນແລ້ວ, ການຄົ້ນຄ້ວາກ່ຽວກັບ ການປ່ຽນແປງຄວາມຊິນເຄີຍດ້ານການບໍລິໂພກຂອງປະຊາຊົນກໍ່ມີຄວາມສຳຄັນເໝືອນກັນ.

5. ຄວນເພີ່ມການລົງທຶນທາງດ້ານສັງຄົມ ໃນຂົງເຂດທີ່ດ້ອຍພັດທະນາກວ່າໃຫ້ຫຼາຍຂຶ້ນ. ນອກຈາກນີ້ ກໍ່ຍັງມີຄວາມຈຳເປັນທີ່ຈະຕ້ອງໄດ້ກຳນົດນະໂຍບາຍ ເພື່ອດຶງດູດເອົາການລົງທຶນຈາກພາກເອກະຊົນ ທັງພາຍໃນ ແລະ ຕ່າງປະເທດເຂົ້າມາໃນຂົງເຂດດັ່ງກ່າວໃຫ້ຫຼາຍ.

## ເອກະສານຊ້ອນທ້າຍ 2.1:
# ການຄິດໄລ່ດັດຊະນີການພັດທະນາມະນຸດ

**ດັດຊະນີການພັດທະນາມະນຸດໄດ້ຄິດໄລ່ເພື່ອເຮັດການສົມທຽບລະດັບສາກົນ**

**HDI:** ດັດຊະນີການພັດທະນາມະນຸດ ແມ່ນການຕີລາຄາແບບປະສົມປະສານ ຫຼື ຫຼາຍມິຕິຂອງສະພາບການພັດທະມະນຸດໃນປະເທດ ຫຼື ຂົງເຂດໃດໜຶ່ງ. ທາງດ້ານທິດສະດີ, ການພັດທະນາມະນຸດໄດ້ກວມເອົາເນື້ອໃນກ້ວາງຂວາງ. ຍ້ອນແນວນັ້ນ ຈຶ່ງເປັນການຍາກທີ່ຈະລວມເອົາໝົດທຸກຂົງເຂດເຂົ້າມາໃນດັດຊະນີອັນດຽວໄດ້. ດັ່ງນັ້ນ, ເພື່ອສະຫຼຸບໃຫ້ເຫັນໂດຍຫຍໍ້, ດັດຊະນີການພັດທະນາມະນຸດຈຶ່ງໝາຍເຖິງການຕີລາຄາແບບປະສົມປະສານຂອງບັນດາຕົວປ່ຽນດັ່ງຕໍ່ໄປນີ້:

ກ. ລາຍຮັບຕໍ່ຄົວເຮືອນ (ວັດແທກໂດຍຫຼັກການຄວາມສາມາດໃນການຊື້ເທົ່າທຽມກັນ (PPP) ຊຶ່ງເປັນເງື່ອນໄຂສຳລັບການສົມທຽບລະດັບສາກົນ),
ຂ. ສົມຜົນເສັ້ນຊື່ (ໂດຍການໃຫ້ນ້ຳໜັກ) ທີ່ປະສົມປະສານລະຫວ່າງຕົວປ່ຽນອັດຕາການອ່ານອອກຂຽນໄດ້ກັບອັດຕາເຂົ້າຮຽນສຸດທິ.
ຄ. ອາຍຸຍືນສະເລ່ຍຂອງຄົນ.

ດັດຊະນີສຳລັບຕົວປ່ຽນສາມຢ່າງຂ້າງເທິງນີ້ໄດ້ຄິດໄລ່ໂດຍແຍກກັນ. ຫຼັງຈາກນັ້ນ, ຈຶ່ງເອົາມາຮວມເຂົ້າກັນ ແລ້ວຫານໃຫ້ສາມ ເພື່ອສ້າງເປັນດັດຊະນີການພັດທະນາມະນຸດ. ເນື່ອງຈາກວ່າ ດັດຊະນີແຕ່ລະອັນໃນສາມຢ່າງນັ້ນແມ່ນຕົວເລກທີ່ບໍ່ມີຫົວໜ່ວຍ, ດັ່ງນັ້ນ, ຕາມຫຼັກການສະຖິຕິແລ້ວ ເຮົາຈຶ່ງສາມາດບວກເຂົ້າກັນໄດ້ ແບບເສັ້ນຊື່, ຊຶ່ງໝາຍຄວາມວ່າ ເຮົາສະເລ່ຍແບບມີນ້ຳໜັກ ແລະ ການກຳນົດນ້ຳໜັກລະຫວ່າງດັດຊະນີນັ້ນ ແມ່ນເທົ່າກັນເພາະຖືວ່າມີຄວາມສຳຄັນເທົ່າກັນ.

$$\text{ດັດຊະນີດ່ຽວ} = \frac{[(\text{ຄ່າຈິງຂອງຕົວປ່ຽນ}) - (\text{ຄ່າຕ່ຳສຸດຂອງຕົວປ່ຽນ})]}{[(\text{ຄ່າສູງສຸດຂອງຕົວປ່ຽນ}) - (\text{ຄ່າຕ່ຳສຸດຂອງຕົວປ່ຽນ})]}$$

ດັດຊະນີສຳລັບຕົວປ່ຽນຕົວໜຶ່ງ ແມ່ນໄດ້ຄິດໄລ່ຈາກຂໍ້ມູນຫຼາຍພາກສ່ວນ, ອີງຕາມແຕ່ລະປະເທດ ຫຼື ເຂດ/ແຂວງຢູ່ພາຍໃນປະເທດ:

**GDI:** ດັດຊະນີການພັດທະນາບົດບາດຍິງ-ຊາຍ (GDI) ຕາມດ້ານຫຼັກການແລ້ວ, ດັດຊະນີການພັດທະນາບົດບາດຍິງຊາຍ (GDI) ກໍ່ຄືກັນກັບດັດຊະນີການພັດທະນາມະນຸດ (HDI), ສິ່ງທີ່ແຕກຕ່າງ ກໍ່ແມ່ນມັນມີຄວາມລະອຽດອ່ອນຕ່າງກັນທາງດ້ານບົດບາດຍິງ-ຊາຍ. ບາດກ້າວທຳອິດຂອງການຄິດໄລ່ດັດຊະນີດັ່ງກ່າວ ແມ່ນຄິດໄລ່ຕາມບົດບາດຍິງ-ຊາຍ ໃນແຕ່ລະອົງປະກອບທັງສາມ. ຫຼັງຈາກນັ້ນ, ຈຶ່ງຄິດໄລ່ດັດຊະນີການກະຈ່າຍສະເໝີພາບ (EDI) ໄດ້ໂດຍການລວມດັດຊະນີແຕ່ລະອັນສະເພາະຂອງບົດບາດຍິງ-ຊາຍ ທີ່ໄດ້ໃຊ້ນ້ຳໜັກຂອງພົນລະເມືອງແຕ່ລະເພດເຂົ້າກັນ ແລະ ສຳປະສິດກົງກັນຂ້າມ ເພື່ອສະແດງທັດສະນະກົງກັນຂ້າມກັບຄວາມບໍ່ສະເໝີພາບຂອງບົດບາດຍິງຊາຍ. ສູດການຄິດໄລ່ມີດັ່ງນີ້:

$$EDI = [\{\text{ອັດຕາສ່ວນພົນລະເມືອງເພດຍິງ } X\ (\text{ດັດຊະນີເພດຍິງ})^{-1}\} + \{\text{ອັດຕາສ່ວນພົນລະເມືອງ ເພດຊາຍ } X\ (\text{ດັດຊະນີເພດຊາຍ})^{-1}\}]^{-1}$$

ບາດກ້າວສຸດທ້າຍແມ່ນ ການບວກສາມດັດຊະນີການກະຈາຍສະເໝີພາບເຂົ້າກັນແລ້ວຫານຜົນບວກໃຫ້ສາມ ເພື່ອໃຫ້ໄດ້ດັດຊະນີການພັດທະນາບົດບາດຍິງຊາຍ.

**HPI:** ດັດຊະນີຄວາມທຸກຍາກຂອງມະນຸດ (HPI) ໝາຍເຖິງສະພາບການຂາດເຂີນຂອງຄົນອັນເນື່ອງມາຈາກການບໍ່ສາມາດຕອບສະໜອງປັດໄຈຄວາມຕ້ອງການຂັ້ນພື້ນຖານຢ່າງຕໍ່ເນື່ອງໄດ້. ມັນແມ່ນ "ຜົນ" ຂອງຄວາມທຸກຍາກ. ດັດຊະນີດັ່ງກ່າວປະກອບດ້ວຍ ສາມອົງປະກອບຄື:

ກ. ອັດຕາສະເລ່ຍຂອງພົນລະເມືອງທີ່ບໍ່ມີຊ່ອງທາງເຂົ້າເຖິງການສະໜອງນ້ຳສະອາດ ແລະ ເດັກມີນ້ຳໜັກຫຼຸດເກນປົກກະຕິ;
ຂ. ອັດຕາການອ່ານອອກຂຽນໄດ້ (%); ແລະ
ຄ. ອັດຕາການຕາຍຂອງເດັກແດງ (IMR, %).

# ເອກະສານຊ້ອນທ້າຍ 2.1:
# ການຄິດໄລ່ດັດຊະນີການພັດທະນາມະນຸດ

ສູດການຄິດໄລ່ ດັດຊະນີຄວາມທຸກຍາກຂອງມະນຸດ (HPI) ແມ່ນ:

*$HPI = [1/3(P_1^3 + P_2^3 + P_3^3)]^{1/3}$ ຊຶ່ງ Pi ແມ່ນເນື້ອໃນຂອງ ກ, ຂ ແລະ ຄ ຂ້າງເທິງ.*

***ແຫຼ່ງຂໍ້ມູນ:** ບົດລາຍງານການພັດທະນາມະນຸດຂອງສາກົນ*

**ການຄິດໄລ່ດັດຊະນີການພັດທະນາມະນຸດ ສໍາລັບບັນດາແຂວງ ໃນ ສປປ ລາວ**
ສໍາລັບການຄິດໄລ່ດັດຊະນີການພັດທະນາມະນຸດ ໃນລະດັບແຂວງ ແມ່ນມີ 4 ອົງປະກອບ ຄື:

ກ. ສະເລ່ຍດັດສົມຄວາມບໍ່ສະເໝີພາບຂອງການຊົມໃຊ້ຂອງແຕ່ລະຄົວເຮືອນໃນແຂວງ,
ຂ. ອັດຕາການອ່ານອອກຂຽນໄດ້ ແລະ ອັດຕາເຂົ້າຮຽນສຸດທິ,
ຄ. ອາຍຸຍືນສະເລ່ຍ, ແລະ
ງ. ມີເສັ້ນທາງຄົມມະນາຄົມເຂົ້າເຖິງ

**ໝາຍເຫດ:** ເພື່ອປຽບທຽບລະຫວ່າງກັນ, ເຮົາໄດ້ຄິດໄລ່ດັດຊະນີການພັດທະນາມະນຸດ (HDI) ຕາມ (ກ), (ຂ) ແລະ (ຄ) ຂ້າງເທິງນັ້ນ ໂດຍບໍ່ໄດ້ປັບດ້ານຄວາມເທົ່າທຽມກັນໃນ (ກ). ດັດຊະນີການພັດທະນາບົດບາດຍິງ-ຊາຍ (GDI) ກໍ່ຄິດໄລຈາກ (ກ), (ຂ) ແລະ (ຄ) ເຊັ່ນດຽວກັນ ໂດຍບໍ່ໄດ້ປັບດ້ານຄວາມບໍ່ເທົ່າທຽມກັນໃນ (ກ). ການຄິດໄລ່ແບບນີ້ ກໍ່ເພື່ອສ້າງຄວາມສະດວກໃນການປຽບທຽບຂໍ້ມູນ ຕາມໄລຍະເວລາທີ່ຜ່ານມາ ແລະ ຕາມການແຍກຍ່ອຍລະອຽດດ້ານບົດບາດຍິງ-ຊາຍ.

**ຂໍ້ມູນ**
ລາຍໄດ້ຂອງແຂວງ: ການຊົມໃຊ້ຂອງແຕ່ລະຄົວເຮືອນ ແມ່ນນໍາໃຊ້ແທນຂໍ້ມູນລາຍຮັບ ຍ້ອນວ່າບໍ່ມີຂໍ້ມູນກ່ຽວກັບລາຍຮັບຂອງແຂວງ. ໂດຍເອົາມາຄູນໃຫ້ (1- GINI) ຂອງຄວາມບໍ່ສະເໝີພາບກ່ຽວກັບທີ່ດິນ ເພື່ອມາອະ ທິບາຍເຫດຜົນຄວາມບໍ່ສະເໝີພາບທີ່ມີຢູ່ໃນແຕ່ລະ ແຂວງ. ແຫຼ່ງຂໍ້ມູນ: ສໍາລັບການຊົມໃຊ້ຂອງແຂວງຈາກການສໍາຫຼວດການຊົມໃຊ້ ແລະ ການໃຊ້ຈ່າຍຂອງຄົວເຮືອນຢູ່ລາວຄັ້ງທີ 3; ແລະ ສໍາລັບຄວາມບໍ່ສະເໝີພາບດ້ານທີ່ດິນແມ່ນໄດ້ມາຈາກການສໍາຫຼວດພົນລະເມືອງ ແລະ ທີ່ຢູ່ອາໄສ ປີ 2005 (GOL (2006a)).

*ອັດຕາເຂົ້າຮຽນສຸດທິ:* ອັດຕາເຂົ້າຮຽນສຸດທິຊັ້ນປະຖົມສຶກສາ, ແຫຼ່ງຂໍ້ມູນ: ກະຊວງສຶກສາທິການ (ປີ 2005).

*ອາຍຸຍືນສະເລ່ຍ:* ໄດ້ຂໍ້ມູນມາຈາກການສໍາຫຼວດພົນລະເມືອງ ແລະ ທີ່ຢູ່ອາໄສ ປີ 2005 (GOL (2006a)).

*ການມີເສັ້ນທາງເຂົ້າເຖິງ:* ການສໍາຫຼວດພົນລະເມືອງ ແລະ ທີ່ຢູ່ອາໄສ ປີ 2005 ໃຫ້ຂໍ້ມູນກ່ຽວກັບອັດຕາສ່ວນ ຈໍານວນບ້ານ ທີ່ມີເສັ້ນທາງໄປເຖິງ.

**ເກນ (ຈຸດ ຫຼື ລະດັບມາດຕະຖານທີ່ກໍານົດເປັນເກນ ໃນການຄິດໄລ່)**
ລາຍຮັບສູງສຸດແມ່ນ 25% ສູງກ່ວາແຂວງທີ່ມີລາຍຮັບສູງສຸດ ແລະ ລາຍຮັບຕໍ່າສຸດ ແມ່ນ 25% ຕໍ່າກ່ວາ ແຂວງທີ່ມີລາຍຮັບຕໍ່າສຸດ. ອັດ ຕາການຮູ້ໜັງສື ແລະ ອັດຕາເຂົ້າຮຽນສູງສຸດ ແມ່ນ 100%. ອັດຕາການຮູ້ໜັງສື ແລະ ອັດຕາເຂົ້າຮຽນຕໍ່າສຸດແມ່ນ ສູນ (0%). ອາຍຸ ຍືນສະເລ່ຍສູງສຸດ ແມ່ນ 25% ສູງກ່ວາໃນແຂວງທີ່ ມີອາຍຸຍືນສະເລ່ຍສູງສຸດ. ສ່ວນອາຍຸຍືນສະເລ່ຍຕໍ່າສຸດ ແມ່ນ 25% ຕໍ່າກ່ວາ ໃນແຂວງທີ່ມີອາຍຸຍືນສະເລ່ຍຕໍ່າສຸດ. ສໍາລັບເກນຂອງການຄິດໄລ່ດັດຊະນີການພັດທະນາມະນຸດ ເພື່ອເຮັດການສົມທຽບຊົ່ວຄາວ ແມ່ນ (1) ມູນຄ່າເທົ່າກັບ 25% ສູງກ່ວາຄ່າສະເລ່ຍສູງກວ່າໝູ່ຂອງສອງປີ ທີ່ເປັນຂອບເຂດດ້ານເທິງ ແລະ (2) ມູນຄ່າທຽບເທົ່າ 25% ຕໍ່າກ່ວາ ມູນຄ່າສະເລ່ຍຕໍ່າສຸດຂອງສອງປີເປັນຂອບເຂດດ້ານລຸ່ມ.

**ສໍາລັບດັດຊະນີຄວາມທຸກຍາກຂອງມະນຸດ (HPI)**
(ກ) ສະເລ່ຍອັດຕາສ່ວນ (%) ປະຊາຊົນບໍ່ມີຊ່ອງທາງເຂົ້າຫາການສະໜອງນໍ້າດື່ມສະອາດ (ຂໍ້ມູນ: ການສໍາຫຼວດພົນລະເມືອງ ແລະ ທີ່ຢູ່ອາໄສ ປີ 2005 (GOL (2006a))) ແລະ ອັດຕາສ່ວນ (%) ຄົນທີ່ທົນທຸກກັບຄວາມເຈັບເປັນຍາວນານ (ແຫຼ່ງຂໍ້ມູນ: ການສໍາ ຫຼວດການຊົມໃຊ້ ແລະ ການໃຊ້ຈ່າຍຂອງຄົວເຮືອນຢູ່ລາວຄັ້ງທີ 3 (GOL (2004)) (ບໍ່ມີຂໍ້ມູນກ່ຽວກັບເດັກທີ່ມີນໍ້າໜັກຫຼຸດເກນປົກກະຕິ ໃນລະດັບແຂວງ); (ຂ) ອັດຕາສ່ວນ ການຫຮູ້ໜັງສືຂຽນເປັນ(%) (ແຫຼ່ງຂໍ້ມູນ: ການສໍາຫຼວດພົນລະເມືອງ ແລະ ທີ່ຢູ່ອາໄສ ປີ 2005) ແລະ (ຄ) ອັດຕາການຕາຍຂອງເດັກແດງ (IMR, %) (ແຫຼ່ງຂໍ້ມູນ: ການສໍາຫຼວດພົນລະເມືອງ ແລະ ທີ່ຢູ່ອາໄສ ປີ 2005 (GOL (2006a)))

# ບົດທີ 3:

## ເສີມຂະຫຍາຍທາງເລືອກໃນການປະກອບອາຊີບຂອງປະຊາຊົນ:
## ການສຶກສາວິໄຈແຍກຕາມຂະແໜງການ



ບົດທີ 3:

# ເສີມຂະຫຍາຍທາງເລືອກໃນການປະກອບອາຊີບຂອງປະຊາຊົນ: ການສຶກສາວິໄຈແຍກຕາມຂະແໜງການ

ການປະຕິຮູບຊົນນະບົດ ຄຽງຄູ່ກັບການຫັນເປັນອຸດສາຫະກຳໃນທ່ວງທ່າກ້າວກະໂດດຂັ້ນ ໄດ້ຮຽກຮ້ອງເຖິງການຕັດສິນໃຈປ່ຽນແປງໄປສູ່ເສັ້ນທາງການພັດທະນາທີ່ສະຫຼັບຊັບຊ້ອນກວ່າ... ຊຶ່ງເຮັດໃຫ້ຫົວໜ່ວຍທຸລະກິດຂັ້ນເມືອງ ແລະ ບ້ານມີການຂະຫຍາຍໂຕຢ່າງວ່ອງໄວ, ການຈັດສັນພູມລຳເນົາເຂດຊົນນະບົດມາເປັນຕົວເມືອງ ແລະ ກິດຈະກຳການຜະລິດທີ່ບໍ່ແມ່ນກະສິກຳມີການຂະຫຍາຍໂຕຢ່າງຫຼວງຫຼາຍ.

**ບໍ່ປະສົງອອກນາມ**

## ສະພາບລວມ

ແຮງງານນອກຂະແໜງກະສິກຳໂດຍທົ່ວໄປແມ່ນຜູ້ຜະລິດທີ່ມີປະສິດທິພາບ ແລະ ມີລາຍຮັບຫຼາຍກວ່າຜູ້ທີ່ເຮັດການຜະລິດກະສິກຳແບບຄອບຄົວທີ່ມີຜະລິດຕະພາບຕ່ຳ. ດັ່ງນັ້ນ, ຈຶ່ງເຮັດໃຫ້ມີການເຄື່ອນຍ້າຍແຮງງານຈາກກະສິກຳໄປສູ່ອາຊີບອື່ນນອກຈາກກະສິກຳ. ກຳລັງແຮງງານລາວ ປະມານ 79% ຍຶດຖືອາຊີບກະສິກຳ ແລະ ກິດຈະກຳທີ່ກ່ຽວຂ້ອງກັບກະສິກຳ. ຕະຫຼອດໄລຍະ 10 ປີ (1995-2005), ການເຄື່ອນຍ້າຍແຮງງານໄປສູ່ກິດຈະກຳທີ່ນອກກະສິກຳ ມີປະມານ 7%. ຖ້າເບິ່ງຈາກຕົວເລກການເຕີບໂຕຂອງລວມຍອດຜະລິດຕະພັນພາຍໃນ (GDP) ທີ່ຄົງຕົວຢູ່ 6-7% ຕັ້ງແຕ່ຕົ້ນຊຸມປີ 1990 ນັ້ນ, ຈະເຫັນວ່າ ຕົວເລກການເຄື່ອນຍ້າຍແຮງງານນີ້ຍັງມີຕ່ຳຢູ່. ການພັດທະນາແຮງງານຕາມຂະແໜງການຂອງແຂວງຕ່າງໆ ມີຄວາມແຕກຕ່າງກັນຢ່າງຫຼວງຫຼາຍ. ແຂວງທີ່ພັດທະນາຫຼາຍກວ່າ ຈະມີອັດຕາສ່ວນແຮງງານນອກຂະແໜງກະສິກຳສູງກວ່າ. ແຕ່ກົງກັນຂ້າມ, ແຂວງທີ່ມີການພັດທະນາໜ້ອຍກວ່າ ຈະມີອັດຕາສ່ວນແຮງງານເຮັດວຽກກະສິກຳຫຼາຍກວ່າ. ໃນລະຫວ່າງປີ 1995-2005 ກຳລັງແຮງງານເກືອບຕ່ຳກວ່າເຄິ່ງໜຶ່ງໄດ້ເຂົ້າເຮັດວຽກໃນກິດຈະກຳທີ່ບໍ່ແມ່ນກະສິກຳ. ແຮງງານກຸ່ມອື່ນ ກໍ່ແມ່ນເຮັດວຽກຜະລິດກະສິກຳ ໂດຍການຖາງປ່າ ແລະ ຈັດແບ່ງດິນຕອນນ້ອຍໆ ທີ່ເຂົາເຈົ້າມີຢູ່ເພື່ອຮັບໃຊ້ໃນການທຳມາຫາກິນ. ໃນໄລຍະປີ 1995-2005 ເນື້ອທີ່ດິນປູກຝັງທັງໝົດ ເພີ່ມຂຶ້ນຫຼາຍກວ່າ 50%.

ຂະແໜງການທີ່ພວມຂະຫຍາຍໂຕແຮງ ແມ່ນຂະແໜງອຸດສາຫະກຳ ແລະ ບໍລິການ ຊຶ່ງຂະແໜງອຸດສາຫະກຳໄດ້ປະກອບສ່ວນສຳຄັນຕໍ່ການເຕີບໂຕທາງດ້ານເສດຖະກິດ. ແຕ່ເຖິງຢ່າງໃດກໍ່ຕາມ, ຂະແໜງດັ່ງກ່າວ ມີການຈ້າງງານພຽງແຕ່ 4.8% ຂອງແຮງງານທັງໝົດເທົ່ານັ້ນ. ຄ່າຄວາມຢືດຫົດຂອງການນຳໃຊ້ແຮງງານຕໍ່ ກັບຜົນຜະລິດ ແມ່ນ 0.57. ຊັບພະຍາກອນທຳມະຊາດ ເປັນອົງປະກອບພື້ນຖານສຳຄັນ ຂອງຂະແໜງອຸດສາ ຫະກຳ ເຊັ່ນ: ການຂຸດຄົ້ນບໍ່ແຮ່ ແລະ ໄຟຟ້າພະລັງນ້ຳ. ໃນຊຸມປີທີ່ຜ່ານມາ ໄດ້ມີການລົງທຶນຢ່າງມະຫາສານເຂົ້າໃນສອງຂະແໜງການດັ່ງກ່າວ ຈຶ່ງເຮັດໃຫ້ມີການຂະຫຍາຍໂຕຢ່າງໄວວາໃນຊ່ວງໄລຍະເວລາສັ້ນໆ. ເຖິງແມ່ນວ່າການລົງທຶນດັ່ງກ່າວ ຈະມີຄວາມສຳຄັນຕໍ່ກັບເສດຖະກິດຂອງຊາດເຮົາກໍ່ຕາມ, ແຕ່ຊ້ຳພັດສະໜອງ ວຽກເຮັດງານທຳໄດ້ຈຳນວນໜ້ອຍ. ຂະແໜງການຍ່ອຍໃນອຸດສາຫະກຳປຸງແຕ່ງ ເຊັ່ນ: ຕັດຫຍິບເຄື່ອງນຸ່ງ ຫົ່ມ, ປຸງແຕ່ງໄມ້, ປຸງແຕ່ງອາຫານ, ແລະ ອື່ນໆ ເຖິງວ່າຂະແໜງການຍ່ອຍເຫຼົ່ານີ້ ຈະມີອັດຕາການໃຊ້ທຶນຕ່ຳ ແລະ ມີຄ່າຄວາມຢືດຫົດຂອງແຮງງານສູງກວ່າ ແຕ່ຊ້ຳພັດມີການຂະຫຍາຍໂຕຊ້າກວ່າ. ຂະແໜງບໍລິການ ກໍ່ມີການຂະຫຍາຍໂຕຊ້າເຊັ່ນດຽວກັນເຖິງວ່າບາງຂະແໜງການຍ່ອຍໃນຂະແໜງການນີ້ເຊັ່ນ: ການຄ້າ, ຂົນສົ່ງ, ທ່ອງທ່ຽວ, ການສຶກສາ ແລະ ສາທາລະນະສຸກຈະມີຄວາມຫຼາກຫຼາຍທາງດ້ານອາຊີບກໍ່ຕາມ. ຄ່າຄວາມຢືດຫົດຂອງແຮງງານທີ່ໃຊ້ໃນຂະແໜງບໍລິການ ແມ່ນ 0.94. ຖ້າເບິ່ງລວມແລ້ວເຫັນວ່າ ຂະບວນການການເຕີບໂຕ ໄດ້ສ້າງວຽກເຮັດງານທຳບໍ່ຫຼາຍ ໂດຍມີຄ່າຄວາມຢືດຫົດການນຳໃຊ້ແຮງງານ ຕໍ່ການເຕີບໂຕຂອງລວມຍອດຜະລິດຕະພັນພາຍໃນ ພຽງແຕ່ 0.40 ເທົ່ານັ້ນ.

ໃນຂະນະທີ່ການລົງທຶນຂະໜາດໃຫຍ່ ແມ່ນການລົງທຶນໂດຍກົງຂອງຕ່າງປະເທດ (ຫຼື FDI), ການລົງທຶນຂອງພາກເອກະຊົນພາຍໃນໂດຍສະເພາະວິສາຫະກິດຂະໜາດນ້ອຍ ແລະ ຂະໜາດກາງ (SMEs) ທີ່ມີທ່າແຮງໃນການສ້າງວຽກເຮັດງານທຳໄດ້ຫຼາຍກວ່າ ແລະ ມີການກະຈາຍລາຍຮັບໄດ້ດີກວ່າ ຊ້ຳພັດຍັງອ່ອນນ້ອຍຢູ່. ຂໍ້ຈຳກັດຕົ້ນຕໍ ຕໍ່ການຂະຫຍາຍໂຕ ຂອງຂະແໜງອຸດສາຫະກຳ ແມ່ນການຂາດບຸກຄະລາກອນທີ່ໄດ້ຮັບການຝຶກອົບຮົມ, ຂາດພື້ນຖານໂຄງລ່າງທີ່ດີ, ຕົ້ນທຶນສູງ, ພາກເອກະຊົນຍັງອ່ອນນ້ອຍ, ຂາດແຫຼ່ງທຶນ ແລະ ອື່ນໆ. ລັດຖະບານ ໄດ້ຄຳນຶງເຖິງບັນຫາດັ່ງກ່າວ ຈຶ່ງໄດ້ຜ່ານກົດໝາຍ ວ່າດ້ວຍ ວິສາຫະກິດໃນປີ 2005 ແລະ ກົດ ໝາຍວ່າດ້ວຍວິສາຫະກິດຂະໜາດນ້ອຍ ແລະ ຂະໜາດກາງ ໃນປີ 2004. ນອກຈາກນີ້, ກໍ່ຍັງໄດ້ມີການນຳໃຊ້ມາດຕະການອື່ນໆເຊັ່ນດຽວກັນ. ສິ່ງເຫຼົ່ານີ້ຈຳເປັນຕ້ອງໄດ້ຮັບການຊຸກຍູ້ຢ່າງຕັ້ງໜ້າຕໍ່ໄປ.

ຖ້າເບິ່ງໄປໃນອະນາຄົດຂ້າງໜ້າ, ອຸດສາຫະກຳຕົ້ນຕໍຕ່າງໆ ຕ້ອງມີການເຊື່ອມຕໍ່ດ້ານການຜະລິດເພື່ອຮອງຮັບ ແລະ ສະໜັບສະໜູນອຸດສາຫະກຳທີ່ມີຢູ່ແລ້ວ ເພື່ອຊ່ວຍໃຫ້ເສດຖະກິດທ້ອງຖິ່ນຂະຫຍາຍໂຕ. ນອກຈາກນີ້, ຍັງຕ້ອງໃຫ້ຄວາມສຳຄັນຕໍ່ການເຕີບໂຕຂອງຂະແໜງກະສິກຳ ແລະ ຕ້ອງມີວິທີການທີ່ມີຫົວຄິດປະດິດສ້າງເພື່ອສົ່ງເສີມພາກເອກະຊົນ.

**ບົດນີ້ໄດ້ຄົ້ນຄວ້າເຖິງ:**

1. ຂະໜາດຂອງການເຄື່ອນຍ້າຍແຮງງານ ຈາກຂະແໜງກະສິກຳ (ແບບຄອບຄົວ) ໄປສູ່ຂະແໜງການອື່ນ ນອກກະສິກຳ ແລະ ວຽກເຮັດງານທຳຂອງເຂົາເຈົ້າໃນຂະແໜງການດັ່ງກ່າວ.

2. ຄວາມອາດສາມາດຂອງຂະແໜງການ ແລະ ຂະແໜງການຍ່ອຍຕ່າງໆ ໃນການສ້າງວຽກເຮັດງານທຳໃຫ້ຫຼາຍຂຶ້ນ.

3. ປັດໄຈຕ່າງໆທີ່ເປັນອຸປະສັກຕໍ່ການເຕີບໂຕຂອງຂະແໜງການນອກກະສິກຳທີ່ເຂັ້ມງານໂດຍສະເພາະກໍ່ແມ່ນບັນຫາກ່ຽວກັບທຶນມະນຸດ, ການພັດທະນາວິສາຫະກິດ ແລະ ສະພາບແວດລ້ອມທຸລະກິດ.

## ຈຸດປະສົງ

ການກະຈາຍແຮງງານໃນຫຼາຍຂະແໜງການ ເປັນເຄື່ອງຊີ້ບອກທີ່ຊັດເຈນ ເຖິງການກ້າວໄປສູ່ການພັດທະນາເສດຖະກິດໃນລະດັບທີ່ສູງກວ່າ. ແຮງງານສ່ວນບຸກຄົນມີລາຍຮັບຫຼາຍຂຶ້ນ ແລະ ມີການດຳລົງຊີວິດດີຂຶ້ນ, ພ້ອມກັນນັ້ນ, ເຂົາເຈົ້າກໍ່ຍັງມີທາງເລືອກໃນການດຳລົງຊີວິດຫຼາຍຂຶ້ນ ຊຶ່ງເຮັດໃຫ້ເຂົາເຈົ້າ ແລະ ຄອບຄົວມີຄວາມພໍໃຈກັບທາງເລືອກດັ່ງກ່າວ. ມີວິທີການຫຼາຍຢ່າງ ເພື່ອສ້າງຄວາມຫຼາກຫຼາຍໃຫ້ແກ່ອາຊີບການງານ ແລະ ສ້າງວຽກເຮັດງານທຳທີ່ມີຄຸນນະພາບຊຶ່ງຈະສົ່ງຜົນຕໍ່ກັບການຍົກລະດັບການພັດທະນາມະນຸດໃຫ້ສູງຂຶ້ນ. ໃນຫຼາຍປະເທດຢູ່ອາຊີຕາເວັນອອກ ທີ່ໄດ້ຮັບຜົນສຳເລັດ ຈາກການພັດທະນານັ້ນເຫັນວ່າ ຂະບວນການພັດທະນາຂອງເຂົາເຈົ້າໄດ້ເຮັດໃຫ້ສະມັດຕະພາບການຜະລິດໃນຂົງເຂດກະສິກຳສູງຂຶ້ນ ແລະ ເຮັດໃຫ້ມີການເຄື່ອນຍ້າຍແຮງງານໄປສູ່ຂົງເຂດທີ່ບໍ່ແມ່ນກະສິກຳຂະຫຍາຍໂຕໄວ[40].

ບາງຂະບວນການດັ່ງກ່າວມີດັ່ງຕໍ່ໄປນີ້:

1. ເບື້ອງຕົ້ນຂອງການຫັນກະສິກຳໃຫ້ທັນສະໄໝຈະຊ່ວຍຮອງຮັບເອົາແຮງງານ ແລະ ເຮັດໃຫ້ການຜະລິດມີປະສິດທິຜົນຫຼາຍຂຶ້ນ. ວິທີການຫັນປ່ຽນດັ່ງກ່າວ ປະກອບມີ ການປະຕິຮູບກະສິກຳ ແລະ ທີ່ດິນ, ການນຳໃຊ້ເຄື່ອງມືທີ່ມີປະສິດທິພາບ, ການພູນໃຊ້ເຕັກໂນໂລຊີທີ່ໃຊ້ແຮງງານ ແລະ ການເຮັດການຕະຫຼາດຜົນຜະລິດກະສິກຳໃນລະດັບລາຄາທີ່ໃຫ້ຜົນກຳໄລ.

2. ຜົນຕອບແທນຈາກທີ່ດິນທີ່ເພີ່ມຂຶ້ນ ຈະນຳໄປສູ່ການຮວບຮວມທີ່ດິນເຂົ້າກັນ ແລະ ການນຳໃຊ້ເຄື່ອງກົນຈັກຫຼາຍຂຶ້ນ ແລະ ນຳໄປສູ່ການລະບາຍແຮງງານທີ່ລົ້ນເຫຼືອ ອອກຈາກຂະແໜງກະສິກຳ ຊຶ່ງຈະຊ່ວຍ ໃຫ້ປະສິດທິພາບ ແລະ ຄ່າຈ້າງແຮງງານໃນຂະແໜງການດັ່ງກ່າວເພີ່ມສູງຂຶ້ນ.

3. ແຮງງານເຫຼືອ ແຕ່ພັດມີຄ່າຈ້າງຕໍ່າ ຄຽງຄູ່ກັບການມີອາຫານຫຼວງຫຼາຍໃນລາຄາຕໍ່າ ຈະຊ່ວຍຮັບປະກັນ ການເຕີບໂຕຂອງຂະແໜງການນອກກະສິກຳ. ວຽກເຮັດງານທຳ ຫຼື ການຈ້າງງານ ກໍ່ມີຄວາມຫຼາກຫຼາຍຂຶ້ນຢ່າງໄວວາ. ລາຍຮັບທາງດ້ານກະສິກຳທີ່ເພີ່ມຂຶ້ນ ກໍ່ຈະຊ່ວຍຊຸກຍູ້ໃຫ້ຕະຫຼາດຮອງຮັບສິນຄ້າທີ່ບໍ່ແມ່ນ ສິນຄ້າກະສິກຳຂະຫຍາຍໂຕ, ຍິ່ງຈະເຮັດໃຫ້ຂະບວນການພັດທະນາມີການຂະຫຍາຍໂຕໄວຂຶ້ນກວ່າເກົ່າ.

4. ແຮງງານສ່ວນໃຫຍ່ ຈະຖືກດຶງດູດເຂົ້າໄປໃນຂະແໜງການທີ່ບໍ່ແມ່ນກະສິກຳຕະຫຼອດເວລາ ຊຶ່ງຈະເຮັດໃຫ້ຜະລິດຕະພາບແຮງງານ ລະຫວ່າງ ຂະແໜງການຫຍັບເຂົ້າໃກ້ຄຽງກັນ ແລະ ສະເໝີພາບກັນໃນລະດັບສູງກວ່າເກົ່າ.

ສປປ ລາວ ໄດ້ມີການຫັນປ່ຽນໃນລັກສະນະນີ້ບໍ່? ຈາກຂໍ້ມູນທີ່ມີຢູ່ຮອດປະຈຸບັນເຫັນວ່າ ຄຳຕອບແມ່ນ "ຍັງເທື່ອ", ທັງນີ້ກໍ່ຍ້ອນວ່າອັດຕາສ່ວນໃຫຍ່ຂອງປະຊາກອນຍັງເຮັດວຽກໃນຂະແໜງກະສິກຳທີ່ມີຜະລິດຕະພາບຕໍ່າ ເຖິງແມ່ນວ່າ ການຂະຫຍາຍໂຕຂອງລວມຍອດຜະລິດຕະພັນພາຍໃນຈະສູງ ແລະ ຍືນຍົງກໍ່ຕາມ. ເຖິງຢ່າງໃດກໍ່ຕາມ, ເຫັນວ່າບາງກິດຈະກຳນອກຂະແໜງກະສິກຳ ກໍ່ໄດ້ຮັບການຂະຫຍາຍໂຕດີ ແລະ ຈາກທັດສະນະຂອງການວາງແຜນແລ້ວ, ພວກເຮົາຕ້ອງຮູ້ວ່າ ຂະແໜງການຍ່ອຍໃດມີທ່າແຮງຈຶ່ງຈະສາມາດກຳນົດນະໂຍບາຍສະໜັບສະໜູນໃຫ້ມີການຈ້າງງານໃນຂະແໜງການດັ່ງກ່າວຫຼາຍຂຶ້ນໄດ້.

## ການສ້າງຄວາມຫຼາກຫຼາຍໃຫ້ແກ່ຂະແໜງການ ແລະ ອາຊີບການງານ

### ການສ້າງຄວາມຫຼາກຫຼາຍໃນລະດັບຂະແໜງການຍັງມີໜ້ອຍ

#### ສະພາບລວມ

ໃນປີ 1995, ແຮງງານທີ່ເຮັດວຽກໃນຂະແໜງກະສິກຳ ຊຶ່ງເປັນກິດຈະກຳຕົ້ນຕໍຂອງເຂົາເຈົ້າ ກວມເອົາ 85.4% ຂອງຈຳນວນແຮງງານທັງໝົດ. ໃນປີ 2005 ຕົວເລກດັ່ງກ່າວໄດ້ຫຼຸດລົງເປັນ 78.5%, ຈຳນວນທີ່ຫຼຸດລົງ 6.9% ນີ້ ແມ່ນຍ້ອນການເຄື່ອນຍ້າຍແຮງງານຈາກຂະແໜງກະສິກຳ ໄປສູ່ຂະແໜງການອື່ນ ໃນໄລຍະທົດສະວັດຜ່ານມາ: ອັດຕາການປ່ຽນແປງ (ແບບເລກຄະນິດ) ແມ່ນປະມານ 0.7% ຕໍ່ປີ (ຮູບສະແດງ 3.1)[41]. ໃນຂະແໜງການທີ່ບໍ່ແມ່ນກະສິກຳມີແຮງງານຜູ້ຊາຍຫຼາຍກວ່າແມ່ຍິງທັງໃນປີ 1995 ແລະ 2005 ທັງນີ້ກໍ່ຄາດວ່າແມ່ນຍ້ອນຜູ້ຊາຍ ມີການເຄື່ອນຍ້າຍທາງດ້ານທີ່ຕັ້ງພູມລຳເນົາຫຼາຍກວ່າ ແລະ ມີທັກສະສີມືແຮງງານດີກວ່າແມ່ຍິງ. ເຖິງຢ່າງໃດກໍ່ຕາມ, ສິ່ງບໍ່ຄາດຄິດກໍ່ໄດ້ເກີດຂຶ້ນ, ອັດຕາການເຄື່ອນຍ້າຍແຮງງານແມ່ຍິງ (8%) ໄປສູ່ກິດຈະກຳອື່ນທີ່ບໍ່ແມ່ນກະ

40 ເບິ່ງ Ishikawa (1967); Rastyannikov (1982); Hayami ແລະ Ruttan (1971); Hayami ແລະ Kikuchi (1981); Breman ແລະ Mundle (1991); Mellor (1976), ແລະ ເມື່ອບໍ່ດົນມານີ້ມີຕົວຢ່າງປະເທດຈີນ. ນອກຈາກນີ້, ເບິ່ງ Grinspun (2004), Humphreys, Sachs, ແລະ Stiglitz (2007) ຕໍ່ກັບບັນຫາກ່ຽວກັບການເຕີບໂຕ ແລະ ການກະຈາຍຜົນປະໂຫຍດ.

41 ແຫຼ່ງຂໍ້ມູນ: ການສຳຫຼວດພົນລະເມືອງຂອງປີ 1995 (GOL (1997) ແລະ 2005 (GOL 2006a). ແຜນພັດທະນາເສດຖະກິດສັງຄົມແຫ່ງຊາດຄັ້ງທີ 6 ໄດ້ຕັ້ງເປົ້າໝາຍໄວ້ວ່າອັດຕາສ່ວນຂອງການຈ້າງງານໃນພາກກະສິກຳຄວນຫຼຸດລົງໃນລະດັບຕໍ່າກວ່າ 74% ໃນປີ 2010. ເປົ້າໝາຍດັ່ງກ່າວຖືວ່າສູງ. (GOL 2006c), ໜ້າ 86-87.

**ຮູບສະແດງ 3.1: ອັດຕາສ່ວນແຮງງານແຈກຢາຍຕາມຂະແໜງການໃນປີ 1995 ແລະ 2005**




***ແຫຼ່ງຂໍ້ມູນ:*** *ການສຳຫຼວດພົນລະເມືອງ ປີ 1995 ແລະ 2005 (GOL (1997) ແລະ GOL (2006a).*

ສິກຳ ແມ່ນສູງກວ່າອັດຕາຂອງແຮງງານຜູ້ຊາຍ (5.5%). ທັງນີ້ກໍ່ຍ້ອນວ່າ ຂະແໜງການບໍລິການ ໄດ້ຮອງຮັບເອົາແຮງງານແມ່ຍິງເປັນຈຳນວນຫຼວງຫຼາຍ. ເຖິງແມ່ນວ່າສະພາບດັ່ງກ່າວ ຈະເປັນໜ້າເພິ່ງພໍໃຈກໍ່ຕາມ, ແຕ່ມັນກໍ່ໄດ້ສ່ອງແສງໃຫ້ເຫັນບາງຢ່າງຄື: ແຮງງານແມ່ຍິງ ໄດ້ເຂົ້າສູ່ຕະຫຼາດແຮງງານນອກລະບົບຢ່າງຫຼີກຫຼ່ຽງບໍ່ໄດ້, ຊຶ່ງຕະຫຼາດແຮງງານດັ່ງກ່າວ ເປັນບ່ອນທີ່ມີເງື່ອນໄຂການເຮັດວຽກບໍ່ແຕກຕ່າງຫຍັງຫຼາຍໄປຈາກບ່ອນທີ່ເຂົາເຈົ້າເຄີຍເຮັດມາກ່ອນ ແລະ ກໍ່ຍັງມີຄວາມເປັນໄປໄດ້ ທີ່ເຂົາເຈົ້າຈະຖືກຂູດຮີດແຮງງານ[42]. ບາງດ້ານທີ່ກ່າວມານີ້ ຈະຍົກຂຶ້ນມາອະທິບາຍຕື່ມອີກພາຍຫຼັງຢູ່ໃນບົດນີ້ ແລະ ບົດທີ 5.

ໃນລະຫວ່າງປີ 1995 ແລະ ປີ 2005 ພົນລະເມືອງທີ່ເຂົ້າສູ່ເກນອາຍຸອອກແຮງງານ ມີຈຳນວນ 0.57 ລ້ານຄົນ. ໃນນັ້ນ, 52.6% ເປັນກຳລັງແຮງງານໃນຂະແໜງກະສິກຳ, ສ່ວນອີກ 47.4% ແມ່ນເຮັດວຽກທີ່ບໍ່ແມ່ນກະສິກຳ (ຮູບສະແດງ 3.2). ຕາມນິຍາມແລ້ວ, ຜູ້ທີ່ຢູ່ໃນເກນອາຍຸອອກແຮງງານ ແມ່ນມີອາຍຸລະຫວ່າງ 10-30 ປີ. ແນ່ນອນວ່າຊາວໜຸ່ມມັກສະແຫວງຫາວຽກນອກຂະແໜງກະສິກຳ. ແຕ່ວ່າໂອກາດເຮັດວຽກນອກຂະແໜງກະສິກຳດັ່ງກ່າວມີໜ້ອຍ ແລະ ເຄິ່ງໜຶ່ງຂອງຈຳນວນຊາວໜຸ່ມ ຍັງບໍ່ໄດ້ໂອກາດເຮັດວຽກພຽງພໍ. ນອກຈາກນີ້ແລ້ວ, ຍັງມີຄວາມເປັນໄປໄດ້ທີ່ຊາວໜຸ່ມໃນໄວອອກແຮງງານດັ່ງກ່າວ ມີຄວາມອາດສາມາດຕ່ຳໃນການຊອກວຽກນອກຂະແໜງກະສິກຳ ແລະ ວຽກອື່ນໆທີ່ໃກ້ຄຽງ.

ຖ້າເບິ່ງຕາມເຂດແລ້ວຈະເຫັນວ່າ ອັດຕາສ່ວນແຮງງານເຮັດວຽກໃນກິດຈະກຳທີ່ບໍ່ແມ່ນກະສິກຳຢູ່ໃນແຂວງຕ່າງໆມີຄວາມແຕກຕ່າງກັນຫຼາຍ: ນະຄອນຫຼວງວຽງຈັນ ແລະ ແຂວງ ວຽງຈັນ ມີກຳລັງແຮງງານທີ່ເຮັດວຽກຫຼາກຫຼາຍປະເພດກວ່າສົມທຽບໃສ່ຄ່າສະເລ່ຍຂອງທົ່ວປະເທດ. ກົງກັນຂ້າມ, ໃນບັນດາແຂວງຫ່າງໄກເຊັ່ນ: ສາລະວັນ, ອັດຕະປື, ຜົ້ງສາລີ, ຫົວພັນ, ແລະ ເຊກອງ, ແຮງງານທີ່ເຮັດວຽກກະສິກຳມີອັດຕາສ່ວນສູງຫຼາຍ (ຮູບສະແດງ 3.3).

ໃນລະຫວ່າງປີ 1995 ແລະ ປີ 2005, ສັດສ່ວນຂອງວຽກທີ່ເກີດຂຶ້ນນອກຂະແໜງກະສິກຳໃນແຂວງຕ່າງໆມີຄວາມແຕກໂຕນກັນຫຼາຍ. ຕົວຢ່າງ ຢູ່ແຂວງຜົ້ງສາລີ ແລະ ຫົວພັນ, ຈຳນວນແຮງງານແມ່ຍິງໃນຂະແໜງກະສິກຳຫຼຸດລົງ. ໃນໄລຍະເວລາດຽວກັນນັ້ນ, ແຮງງານແມ່ຍິງ ໄດ້ເຂົ້າເຮັດວຽກໃນກິດຈະກຳ ທີ່ບໍ່ແມ່ນກະສິກຳຫຼາຍກວ່າຈຳນວນແຮງງານແມ່ຍິງທັງໝົດ ທີ່ຢູ່ໃນກຳລັງແຮງງານ. ນີ້ໝາຍຄວາມວ່າ ຈຳນວນແຮງງານແມ່ຍິງທັງໝົດ ທີ່ເຂົ້າເຮັດວຽກໃນຂະແໜງທີ່ບໍ່ແມ່ນກະສິກຳໄດ້ກວມເອົາແຮງງານແມ່ຍິງທີ່ມາຈາກຂະແໜງກະສິກຳ.

ສະຫຼຸບແລ້ວ, ເຮົາໄດ້ໃຫ້ຄຳນິຍາມອັດຕາສ່ວນການເພີ່ມຂຶ້ນຂອງແຮງງານໃນຂະແໜງການທີ່ບໍ່ແມ່ນກະສິກຳຕໍ່ກັບການເພີ່ມຂຶ້ນຂອງແຮງງານທັງໝົດ ໃນລະຫວ່າງປີ 1995 ແລະ 2005 ໃນທີ່ນີ້ວ່າແມ່ນ ການປ່ຽນແປງສະເລ່ຍ ຂອງການກະຈາຍຄວາມຫຼາກຫຼາຍທາງດ້ານອາຊີບການງານ. ແຂວງໃດທີ່ມີອັດຕາສ່ວນນີ້ຫຼຸດລົງຕ່ຳກວ່າຄ່າສະເລ່ຍຖືວ່າຢູ່ໃນກຸ່ມທີ່ມີການກະຈາຍຄວາມຫຼາກຫຼາຍທາງດ້ານອາຊີບການງານ 'ຊ້າ', ຖ້າຢູ່ເທິງເສັ້ນມາດຕະຖານ (ຫຼືໃກ້ຄຽງ) ກໍ່ຖືວ່າ 'ໃກ້ຄ່າສະເລ່ຍ' ແລະ ຖ້າຢູ່ສູງກວ່າ ກໍ່ຖືວ່າ 'ໄວ'. ຕາຕະລາງ 3.1 ສະແດງເຖິງການແຈກຢາຍຂອງແຕ່ລະກຸ່ມດັ່ງກ່າວໃນແຂວງຕ່າງໆ. ແຂວງສາລະວັນແລະສະຫວັນນະເຂດແມ່ນສອງແຂວງທີ່ມີການກະຈາຍຄວາມຫຼາກຫຼາຍທາງດ້ານອາຊີບການງານທີ່ຍັງຊັກຊ້າຢ່າງໜ້າເປັນຫ່ວງ ຊຶ່ງໃນນັ້ນ, ແຂວງສາລະວັນ ມີຕົວຊີ້ບອກດ້ານການພັດທະນາຫຼາຍຕົວຫຼ້າຫຼັງກວ່າໝູ່ ແລະ ແຂວງສະຫວັນນະເຂດ ກໍ່ມີຕົວຊີ້ບອກຫຼາຍຕົວໄດ້ຫຼຸດລົງເຊັ່ນດຽວກັນ.

ຂໍ້ສັງເກດ: ໂດຍທົ່ວໄປແລ້ວ ການເຄື່ອນຍ້າຍແຮງງານ ອອກຈາກຂະແໜງກະສິກຳ ເຮັດໃຫ້ສະຖານະພາບຂອງຄົນທາງດ້ານການພັດທະນາມະນຸດດີຂຶ້ນ, ແຕ່ກໍ່ບໍ່ເປັນເຊັ່ນນັ້ນສະເໝີໄປ. ຍົກຕົວຢ່າງ, ການເຄື່ອນຍ້າຍອອກຈາກຂະແໜງກະສິກຳ ຄວນຊ່ວຍໃຫ້ແຂວງ ຜົ້ງສາລີ ມີການພັດທະນາມະນຸດດີຂຶ້ນ, ແຕ່ວ່າກໍ່ບໍ່ເປັນເຊັ່ນ

42 ເບິ່ງໂອລົດ (2006)

**ກ່ອງ 3.1: ການຈ້າງງານໃນຂະແໜງທີ່ບໍ່ແມ່ນກະສິກຳຊ່ວຍສົ່ງເສີມການຫຼຸດຜ່ອນຄວາມທຸກຍາກຢູ່ລາວ: ຢັ້ງຢືນໄດ້ຈາກຂໍ້ມູນໃນປະຫວັດທີ່ຜ່ານມາ**

ໃນກ່ອງ 3.3. ຈະສະແດງຂໍ້ມູນທາງດ້ານເສດຖະກິດ ທີ່ຊີ້ໃຫ້ເຫັນວ່າການຈ້າງງານໃນຂະແໜງການທີ່ບໍ່ແມ່ນກະສິກຳສາມາດຊ່ວຍຫຼຸດຜ່ອນຄວາມທຸກຍາກຂອງປະຊາຊົນໄດ້.

ກຳມະກອນຂຸດຄົ້ນບໍ່ແຮ່ຂະໜາດນ້ອຍ ຢູ່ບ້ານນ້ອຍ, ເມືອງຫີນບູນ, ແຂວງຄຳມ່ວນ ໄດ້ກ່າວວ່າ: "ພວກເຮົາແມ່ນແຮງງານຮັບຈ້າງ ທີ່ເຮັດວຽກຕະຫຼອດປີໃນແຫຼ່ງຂຸດຄົ້ນແຮ່ກົ່ວ ຊຶ່ງເປັນກິດຈະການຂະໜາດນ້ອຍ ທີ່ເຮັດສັນຍາຂຸດຄົ້ນໃຫ້ແກ່ບໍລິສັດເກົາຫຼີ. ມັນເປັນວຽກທີ່ໜັກຫຼາຍ ເພາະຕ້ອງໄດ້ຕາກແດດທຸບກ້ອນຫີນເປັນເວລາຫຼາຍຊົ່ວໂມງ...ຖ້າມື້ໃດຕ້ອງໄດ້ທຳຄວາມສະອາດແຮ່ ກໍ່ຈະຕ້ອງເຮັດວຽກຈົນຮອດຕອນຄ່ຳ. ແຕ່ລາຍໄດ້ແມ່ນ ສູງກວ່າເຮັດວຽກອື່ນ, ມື້ໜຶ່ງໄດ້ປະມານ 40.000 ກີບ ຫຼື ສູງກວ່ານັ້ນ, ຂຶ້ນກັບວ່າຂຸດໄດ້ຫຼາຍປານໃດ. ຖ້າຫາກວ່າ ສະມາຊິກໃນຄອບຄົວເຂົ້າມາຊ່ວຍກັນເຮັດ, ພວກເຮົາກໍ່ຈະຂຸດຄົ້ນໄດ້ຫຼາຍ ແລະ ໄດ້ເງິນຫຼາຍຂຶ້ນ. ມັນແມ່ນວຽກໜັກ ແລະ ໜ້າເບື່ອທັງບໍ່ມີຄວາມກ້າວໜ້າ. ເຖິງຢ່າງໃດກໍ່ຕາມ, ໃນສະຖານທີ່ແບບນີ້ ພວກເຮົາບໍ່ສາມາດທຳການຜະລິດກະສິກຳໄດ້. ຄວາມຈິງແລ້ວ, ພວກເຮົາສາມາດສ້າງລາຍຮັບໄດ້ຫຼາຍກວ່າການຜະລິດກະສິກຳ.

ກຸ່ມແມ່ຍິງອາວຸໂສ, ບ້ານດອນກອງເຂົ້າ, ເມືອງຄົງເຊໂດນ, ແຂວງສາລະວັນ ກ່າວວ່າ: 'ຍ້ອນວ່າມີອາຊີບປູກເຂົ້າ ພວກເຮົາຈຶ່ງມີວຽກເຮັດໃນລະດູຝົນ. ຜູ້ທີ່ອອກໄປຊອກວຽກເຮັດຢູ່ບ່ອນອື່ນ ກໍ່ຍັງກັບຄືນມາຊ່ວຍເຮັດນາ ໃນລະດູນີ້. ເຖິງຢ່າງໃດກໍ່ຕາມ, ເມື່ອໝົດລະດູຝົນ ແລະ ເກັບກ່ຽວເຂົ້າແລ້ວ, ພວກເຮົາກໍ່ບໍ່ມີຫຍັງເຮັດ. ພວກເຮົາບໍ່ມີຊົນລະປະທານ ທີ່ຊ່ວຍການປູກພືດລະດູແລ້ງໄດ້. ຊາວໜຸ່ມມີໂອກາດໄປຊອກວຽກອື່ນເຮັດ, ແຕ່ພວກເຮົາແມ່ຍິງມີລູກ ແລະ ເຮືອນໃຫ້ເບິ່ງແຍງ ແມ່ນມີທາງເລືອກໜ້ອຍ. ຢູ່ບ້ານ ພວກເຮົາກໍ່ເຮັດວຽກຢູ່ຕະຫຼອດເຊັ່ນ: ພະຍາຍາມລ້ຽງໄກ່ ແຕ່ພັດຖືກພະຍາດໄຂ້ຫວັດສັດປີກທຳລາຍໃນປີຜ່ານມາ. ດັ່ງນັ້ນ, ພວກເຮົາຈຶ່ງບໍ່ມີວຽກເຮັດເລີຍ'.

ສິ່ງທີ່ກ່າວມານັ້ນ ເປັນເຫດຜົນຈະແຈ້ງ ເພື່ອເລັ່ງສ້າງຄວາມຫຼາກຫຼາຍທາງດ້ານອາຊີບການງານ ເພື່ອຫຼຸດຜ່ອນຄວາມທຸກຍາກ ແລະ ເພີ່ມລະດັບການພັດທະນາມະນຸດ.

***ແຫຼ່ງຂໍ້ມູນ:*** *ສຳຫຼວດພາກສະໜາມ, ເດືອນກຸມພາ 2008*

**ຮູບສະແດງ 3.2: ອັດຕາສ່ວນປະຊາກອນ ທີ່ເຂົ້າສູ່ກຳລັງແຮງງານ ແຈກຢາຍຕາມຂະແໜງການ ແລະ ເພດລະຫວ່າງປີ 1995 ແລະ ປີ 2005**




***ແຫຼ່ງຂໍ້ມູນ:*** *ການສຳຫຼວດພົນລະເມືອງປີ 1995 ແລະ 2005 (GOL (1997) and GOL (2006a)*

### ກ່ອງ 3.2: ຄວາມຫຼາກຫຼາຍທາງດ້ານອາຊີບຕາມກຸ່ມຊົນເຜົ່າ

ຮູບສະແດງລຸ່ມນີ້ສະແດງເຖິງອັດຕາສ່ວນແຮງງານເພດຍິງ ທີ່ເຮັດວຽກໃນຂະແໜງກະສິກຳ ແລະ ບໍ່ແມ່ນກະສິກຳ ໂດຍຈັດແບ່ງຕາມສີ່ເຜົ່າຕາມໝວດພາສາ.ໃນນັ້ນ, ກຸ່ມເຜົ່າລາວ-ໄຕ ຖືກແບ່ງອອກເປັນເຜົ່າ 'ລາວ' (ປະມານ 54.5%) ແລະ 'ລາວອື່ນໆ' (ປະມານ 10.4%) ເນື່ອງຈາກວ່າ ສອງກຸ່ມນີ້ບໍ່ຄືກັນ. ສອງດ້ານເດັ່ນທີ່ສັງເກດເຫັນໄດ້ດັ່ງລຸ່ມນີ້:

*ດ້ານທີໜຶ່ງ,* ແຮງງານເຮັດວຽກທີ່ບໍ່ແມ່ນກະສິກຳມີອັດຕາສ່ວນສູງຫຼາຍໃນເຜົ່າລາວທຽບໃສ່ເຜົ່າອື່ນໆ.ກົງກັນຂ້າມ,ກິດຈະກຳຂອງແຮງງານເຜົ່າມອນ-ຂະແມບໍ່ມີຄວາມຫຼາກຫຼາຍປານໃດ. ເຜົ່າ 'ລາວອື່ນໆ' ເຊັ່ນ: ໃນກຸ່ມເຜົ່າລາວ-ໄຕ ມີກິດຈະກຳທີ່ບໍ່ແມ່ນກະສິກຳ ຫຼາກຫຼາຍກວ່າກຸ່ມເຜົ່າມົ້ງ-ອີວມຽນ, ແຕ່ກໍ່ຍັງໜ້ອຍກວ່າກຸ່ມ ເຜົ່າຈີນ-ຕີເບດ. ແນ່ນອນ, ສິ່ງດັ່ງກ່າວນີ້ ສະທ້ອນໃຫ້ເຫັນເຖິງຄວາມແຕກຕ່າງຂອງບັນດາກຸ່ມເຜົ່າຈາກກຸ່ມອື່ນ ບໍ່ວ່າຈະເປັນທາງດ້ານທີ່ຕັ້ງພູມລຳເນົາຂອງເຜົ່າ, ດ້ານວັດທະນະທຳ ແລະ ພາສາ. ຕໍ່ກັບຜົນຂອງການຄົ້ນຄວ້າທີ່ກ່າວມານີ້ ຈຶ່ງໄດ້ຮຽກຮ້ອງໃຫ້ມີການເອົາໃຈໃສ່ຕື່ມ. ການວາງນະໂຍບາຍໃດໆກໍ່ຕາມຕໍ່ກັບບັນຫາດັ່ງກ່າວ ຄວນມີຄວາມລະອຽດອ່ອນຕື່ມ.

*ດ້ານທີສອງ,* ແຮງງານເພດຍິງທີ່ເຮັດວຽກກະສິກຳມີອັດຕາສ່ວນຫຼາຍກວ່າແຮງງານເພດຊາຍໃນທຸກໆກຸ່ມເຜົ່າ; ສະຫຼຸບແລ້ວ, ແຮງງານເພດຍິງ ໃນກຸ່ມເຜົ່າພາສາມອນ-ຂະແມເຮັດວຽກທີ່ ບໍ່ແມ່ນກະສິກຳໜ້ອຍທີ່ສຸດ. ສາເຫດຕົ້ນຕໍທີ່ເຮັດໃຫ້ເຂົາເຈົ້າບໍ່ສາມາດປ່ຽນອາຊີບ ໄປສູ່ອາຊີບອື່ນທີ່ບໍ່ແມ່ນກະສິກຳໃຫ້ຫຼາກຫຼາຍໄດ້ ກໍ່ຍ້ອນວ່າ ເຂົາເຈົ້າມີລະດັບການສຶກສາ ແລະ ທັກສະສີມືຈຳກັດ ພ້ອມທັງຍັງມີທີ່ຕັ້ງພູມລຳເນົາ ແລະ ພາສາຂອງເຜົ່າທີ່ແຕກຕ່າງຫຼາຍຈາກກຸ່ມອື່ນດັ່ງທີ່ໄດ້ກ່າວມາຂ້າງເທິງນັ້ນ.

**ອັດຕາສ່ວນແຮງງານແຈກຢາຍ ຕາມຂະແໜງການ ໃນແຕ່ລະກຸ່ມໝວດພາສາ ແລະ ເພດ (ອາຍຸ 10 ປີ ຂຶ້ນໄປ), ປີ 2005**




***ແຫຼ່ງຂໍ້ມູນ:*** *ການສຳຫຼວດພົນລະເມືອງປີ 2005 (GOL (2006a)).*

**ຮູບສະແດງ 3.3: ອັດຕາສ່ວນແຮງງານເຮັດວຽກໃນຂະແໜງທີ່ບໍ່ແມ່ນກະສິກຳໃນແຕ່ລະແຂວງ ໃນປີ 2005**




***ແຫຼ່ງຂໍ້ມູນ:*** *GOL (2006a).*

ນັ້ນ! ຍ້ອນວ່າ ແຂວງ ຜົ້ງສາລີ ແມ່ນຢູ່ໃນອັນດັບຕໍ່າສຸດຂອງຕົວເລກການພັດທະນາມະນຸດ ແລະ ແຂວງຫົວພັນ ກໍ່ມີຕົວເລກດັ່ງກ່າວບໍ່ສູງປານໃດ. ສະນັ້ນ, ແມ່ນສາເຫດໃດທີ່ເຮັດໃຫ້ການກະຈາຍດັ່ງກ່າວ ບໍ່ເຮັດໃຫ້ການພັດທະນາມະນຸດດີຂຶ້ນ? ຄຳຕອບໜຶ່ງທີ່ເປັນໄປໄດ້ ແມ່ນວ່າວຽກທີ່ແມ່ນກະສິກຳຢູ່ແຂວງເຫຼົ່ານັ້ນ ບໍ່ແຕກຕ່າງໄປຈາກວຽກກະສິກຳ ຊຶ່ງເປັນວຽກນອກລະບົບ ທີ່ມີສະມັດຕະພາບການຜະລິດຕໍ່າ ແລະ ຈ່າຍຄ່າຕອບແທນຕໍ່າ. ດັ່ງນັ້ນ, ຈຶ່ງຈຳເປັນຕ້ອງໄດ້ມີການຄົ້ນຄວ້າລະອຽດໃນແຂວງເຫຼົ່ານີ້.

## *ສະຫຼຸບຫຍໍ້:*

1. *ກຳລັງແຮງງານ ໄດ້ເຄື່ອນຍ້າຍຈາກຂະແໜງກະສິກຳ ໄປສູ່ຂະແໜງທີ່ບໍ່ແມ່ນກະສິກຳ ປະມານ 6.9%. ຕົວເລກອັນນີ້ຖືວ່າຍັງຕໍ່າຢູ່ຖ້າທຽບກັບການຂະຫຍາຍໂຕຂອງລວມຍອດຜະລິດຕະພັນພາຍໃນ (GDP).*

2. *ໃນລະຫວ່າງປີ 1995-2005 ມີກຳລັງແຮງງານ (ຊຶ່ງແມ່ນຊາວໜຸ່ມ) ຕໍ່າກວ່າ 50% ເຮັດວຽກໃນອາຊີບນອກຂະແໜງກະສິກຳ ຊຶ່ງສ່ອງແສງໃຫ້ເຫັນວ່າ ຂະແໜງທີ່ບໍ່ແມ່ນກະສິກຳຍັງຂາດຄວາມອາດສາມາດໃນການດຶງດູດເອົາແຮງງານຫຼືວ່າຄວາມສາມາດໃນການຊອກວຽກເຮັດງານທຳນອກຂະແໜງກະສິກຳຂອງແຮງງານດັ່ງກ່າວຍັງຕໍ່າ.*

3. *ການເຄື່ອນຍ້າຍແຮງງານຈາກຂະແໜງກະສິກຳໃນບາງແຂວງພາກເໜືອ ແລະ ເຊກອງ ບາງຄັ້ງກໍ່ບໍ່ສາມາດອະທິບາຍໄດ້ຍ້ອນວ່າ ມັນບໍ່ຕິດພັນກັບການຫຼຸດລົງຂອງຕົວເລກຄວາມທຸກຍາກ ຫຼື ການເພີ່ມຂຶ້ນຂອງຕົວເລກດັດຊະນີພາຍການພັດທະນາມະນຸດ. ຄາດວ່າ ການເຄື່ອນຍ້າຍແຮງງານດັ່ງກ່າວ ອາດເປັນການເຄື່ອນຍ້າຍຈາກກິດຈະກຳກະສິກຳທີ່ມີປະສິດທິພາບຕໍ່າໄປສູ່ກິດຈະກຳອື່ນທີ່ມີປະສິດທິພາບຕໍ່າຄືກັນໃນຂະແໜງການເສດຖະກິດທີ່ບໍ່ເປັນລະບົບ. ດັ່ງນັ້ນ ຈຶ່ງຮຽກຮ້ອງໃຫ້ມີການເອົາໃຈໃສ່ຕື່ມ.*

## ສົ່ງເສີມອາຊີບໃນຂະແໜງການທີ່ບໍ່ແມ່ນກະສິກຳ: ການສຶກສາວິໄຈລົງເລິກຂະແໜງການຍ່ອຍ

ແມ່ນຫຍັງແທ້ທີ່ເປັນວິທີການຈັດແບ່ງກິດຈະກຳພາຍໃນຂະແໜງການທີ່ບໍ່ແມ່ນກະສິກຳ? ກິດຈະກຳເຫຼົ່ານີ້ມີ ທ່າແຮງຈະຂະຫຍາຍໂຕ ແລະ ສະໜອງອາຊີບໄດ້ດີຢູ່ບໍ່? ກິດຈະກຳດັ່ງກ່າວມີທ່າແຮງບົ່ມຊ້ອນທີ່ຈະແກ້ໄຂສິ່ງທ້າທາຍໃນການພັດທະນາມະນຸດ ຫຼື ບໍ່?

### ການຈັດປະເພດແຮງງານທີ່ບໍ່ນອນໃນຂະແໜງກະສິກຳຕາມຂະແໜງການຍ່ອຍ[43]

ໃນປີ 1995, ແຮງງານໃນຂະແໜງການບໍລິການກວມເອົາ 76% ຂອງການຈ້າງງານໃນຂະແໜງທີ່ບໍ່ແມ່ນກະສິກຳ. ຕົວເລກດັ່ງກ່າວໄດ້ເພີ່ມຂຶ້ນເປັນ 77.7% ໃນປີ 2005-06. ເພາະສະນັ້ນ, ຂະແໜງອຸດສາຫະກຳຈຶ່ງ ກວມເອົາແຮງງານໜ້ອຍກວ່າ 25% ຂອງແຮງງານໃນຂະແໜງທີ່ບໍ່ແມ່ນກະສິກຳ. ສິ່ງດັ່ງກ່າວນີ້ ມີລັກສະນະສວນທາງກັບທ່າອ່ຽງປະຈຸບັນ ຍ້ອນວ່າ ຜົນຜະລິດຂອງຂະແໜງອຸດສາຫະກຳປຸງແຕ່ງ ມີການຂະຫຍາຍໂຕໄວທີ່ສຸດໃນສອງສາມປີຜ່ານມາ, ຊຶ່ງໃນປະຈຸບັນກວມຫຼາຍກວ່າ 30% ຂອງລວມຍອດຜະລິດຕະພັນພາຍໃນ (GDP) ແລະ ປະກອບສ່ວນຫຼາຍທີ່ສຸດຕໍ່ການຂະຫຍາຍໂຕຂອງລວມຍອດຜະລິດຕະພັນພາຍໃນ. ໃນທາງກົງກັນຂ້າມ, ຂະແໜງບໍລິການ ປະກອບສ່ວນພຽງແຕ່ປະມານໜຶ່ງສ່ວນສີ່ຂອງລວມຍອດຜະລິດຕະພັນພາຍໃນ. ການທີ່ຂະແໜງການບໍລິການ ກວມເອົາການຈ້າງງານຫຼາຍກວ່າໝູ່ໃນກິດຈະກຳທີ່ບໍ່ແມ່ນກະສິກຳ ແທນທີ່ຈະແມ່ນຂະແໜງອຸດສາຫະກຳນັ້ນ ຖືວ່າບໍ່ແມ່ນລັກສະນະປົກກະຕິ ສຳລັບປະເທດກຳລັງພັດທະນາທີ່ກຳລັງຢູ່ໃນຂັ້ນເລີ່ມຕົ້ນຂອງການພັດທະນາ.

ຂອບເຂດຂອງກິດຈະກຳຕ່າງໆໃນຂະແໜງການທີ່ບໍ່ແມ່ນກະສິກຳໄດ້ຮັບການຈັດແບ່ງໃຫ້ມີຄວາມສະເພາະເຈາະຈົງແຄບເຂົ້າ. ການແຈກຢາຍແຮງງານອອກເປັນຫຼາຍຂະແໜງການຍ່ອຍ (ໂດຍໃຊ້ 2 ໂຕເລກ) ໄດ້ຮັບການຈັດກຸ່ມຄືນໃໝ່ເປັນ 11 ກຸ່ມຍ່ອຍ (ໂດຍເບິ່ງຈາກຈຳນວນການຈ້າງງານຕໍ່ກັບການຜະລິດ-ຮູບສະແດງ 3.4. ຄວາມໜາແໜ້ນຂອງແຮງງານແມ່ນເຫັນໄດ້ຊັດເຈນຄື: ພະນັກງານລັດຖະກອນ ກວມຫຼາຍກວ່າ 1/4 ຂອງແຮງງານ ທີ່ເຮັດວຽກນອກຂະແໜງກະສິກຳທັງໝົດ, ຖັດມາກໍ່ແມ່ນ ແຮງງານຕາມຮ້ານຂາຍສົ່ງ ແລະ ຂາຍຍ່ອຍ ແລະ ແຮງງານໃນອຸດສາຫະກຳປຸງແຕ່ງ. ສາມຂະແໜງການຍ່ອຍນີ້ ກວມເອົາ 2/3 ຂອງແຮງງານທີ່ບໍ່ນອນໃນຂະແໜງກະສິກຳ. ສ່ວນຂະແໜງການຍ່ອຍທີ່ເຫຼືອ ແມ່ນບໍ່ມີຂະແໜງໃດມີສັດສ່ວນແຮງງານ ກວມຫຼາຍກວ່າ 10% ຂອງ

**ຕາຕະລາງ 3.1: ການແຈກຢາຍແຂວງຕາມອັດຕາການປ່ຽນແປງໃນອາຊີບ ທີ່ບໍ່ແມ່ນກະສິກຳ ຕໍ່ອາຊີບທັງໝົດໃນໄລຍະປີ 1995-2005**

| ຫຼັກເກນໃນການຈັດແບ່ງ | ແຂວງ |
|---|---|
| ໄວ (ສູງກວ່າຄ່າສະເລ່ຍຫຼາຍ) | ຜົ້ງສາລີ, ຫຼວງນ້ຳທາ, ອຸດົມໄຊ, ບໍ່ແກ້ວ, ຫຼວງພະບາງ, ຊຽງຂວາງ, ເຊກອງ |
| ເສັ້ນມາດຕະຖານ (ໃກ້ຄ່າສະເລ່ຍ) | ຫົວພັນ, ໄຊຍະບູລີ, ແຂວງວຽງຈັນ, ຄຳມ່ວນ, ຈຳປາສັກ, ອັດຕະປື |
| ຊ້າ (ຕໍ່າກວ່າຄ່າສະເລ່ຍ) | ນະຄອນຫຼວງວຽງຈັນ, ສະຫວັນນະເຂດ, ສາລະວັນ |

***ແຫຼ່ງຂໍ້ມູນ:*** *ການສຳຫຼວດພົນລະເມືອງ ແລະ ທີ່ຢູ່ອາໄສ ປີ 1995 ແລະ 2005, ແລະ ການສຳຫຼວດເສດຖະກິດທົ່ວ ປະເທດ 2006.*

43 ພາກນີ້ອະທິບາຍຊຸດຂໍ້ມູນທີ່ໄດ້ຈາກການສຳຫຼວດເສດຖະກິດ ປີ 2006 ແລະ ສຳຫຼວດພົນລະເມືອງ ແລະ ທີ່ຢູ່ອາໄສ ປີ 2005 ('EC06', GOL (2007a)). ລາຍລະອຽດເບິ່ງເອກະສານຊ້ອນທ້າຍ 3.2.



ການຫັນເປັນກົນຈັກໃນກະສິກຳທີ່ມີການເລືອກເຟັ້ນສາມາດປັບປຸງຄຸນນະພາບຂອງວຽກ ແລະ ຜະລິດຕະພາບຂອງແຮງງານ

ແຮງງານນອກກະສິກຳ. ດ້ານໜຶ່ງ, ລັກສະນະດັ່ງກ່າວ ຍັງສະແດງໃຫ້ເຫັນວ່າຂະແໜງອຸດສາຫະກຳ ແມ່ນເນັ້ນໜັກໃສ່ທຶນຮອນ ແລະ ແຮງງານທີ່ມີທັກສະສີມືດີ (ບໍ່ແຮ່ ແລະ ພະລັງງານໄຟ ຟ້າ) ໂດຍສະເພາະໃນຂົງເຂດເສດຖະກິດ ທີ່ຄົນເຮົາຊອກຫາຄວາມຫຼາກຫຼາຍໃຫ້ແກ່ອາຊີບການງານຂອງເຂົາເຈົ້າ. ດ້ານສອງ, ລະດັບທຶນມະນຸດຕ່ຳ ເປັນອຸປະສັກຕໍ່ຄວາມອາດສາມາດໃນການຖືກຈ້າງງານຂອງແຮງງານ ສ່ວນໃຫຍ່ທີ່ຢູ່ນອກຂະແໜງກະສິກຳແບບດັ້ງເດີມ. ສຸດທ້າຍ, ແຮງງານໃນຂະແໜງທີ່ບໍ່ແມ່ນກະສິກຳຈຳນວນຫຼວງຫຼາຍກໍ່ຖືກຈ້າງງານຢູ່ໃນຂະແໜງການຄ້າ ແລະ ການບໍລິການເສດຖະກິດ ຊຶ່ງສະແດງໃຫ້ເຫັນວ່າ ບາງກິດຈະກຳໃນຂະແໜງການເຫຼົ່ານີ້ ອາດບໍ່ແຕກຕ່າງຫຍັງຫຼາຍກັບວຽກກະສິກຳແບບພໍແຕ່ກຸ້ມກິນໂດຍສະເພາະໃນດ້ານຄຸນນະພາບຂອງວຽກ ແລະ ລະດັບລາຍຮັບ. ຍົກຕົວຢ່າງວ່າ ແຮງງານເຫຼົ່ານີ້ຈະເຮັດວຽກຕ່າງໆ ເຊັ່ນ: ເປັນຜູ້ ຊ່ວຍໃນຮ້ານຂາຍເຄື່ອງຍ່ອຍ ຫຼື ເປັນພະນັກງານທຳຄວາມສະອາດໃນຮ້ານອາຫານນ້ອຍໆ. ບໍ່ເປັນສິ່ງທີ່ໜ້າແປກໃຈເລີຍ ທີ່ລະດັບການພັດທະນາມະນຸດຢູ່ ແຂວງຜົ້ງສາລີ ແລະ ຫົວພັນບໍ່ມີການເພີ່ມຂຶ້ນ ທັງໆທີ່ຢູ່ສອງແຂວງດັ່ງກ່າວ ມີຄວາມຫຼາກຫຼາຍທາງດ້ານອາຊີບການງານ.

ເຖິງແມ່ນວ່າ ຄວາມຫຼາກຫຼາຍຂອງວຽກ ນອກຂະແໜງກະສິກຳແບບດັ້ງເດີມ ຈະແມ່ນເງື່ອນໄຂຈຳເປັນ ເພື່ອຍົກລະດັບການພັດທະນາມະນຸດກໍ່ຕາມ ແຕ່ເງື່ອນໄຂນັ້ນກໍ່ຍັງບໍ່ພຽງພໍ. ເພາະສະນັ້ນ, ຄວາມສາມາດໃນການສ້າງວຽກເຮັດງານທຳ ແລະ ປະເພດຂອງວຽກເຮັດງານທຳ ກໍ່ແມ່ນປັດໄຈສຳຄັນທີ່ຄວນນຳມາພິຈາລະນາຂະແໜງການຍ່ອຍໃດ ທີ່ມີທ່າແຮງບົ່ມຊ້ອນໃນການຂະຫຍາຍໂຕ ແລະ ສາມາດຮອງຮັບເອົາແຮງງານ ໃຫ້ມີຈຳນວນເພີ່ມຂຶ້ນໄດ້?

ໃນສະພາບທີ່ລັດຖະບານ ມີການຂາດດຸນທາງດ້ານລາຍຮັບເພີ່ມຂຶ້ນນັ້ນ ຄົງເປັນໄປບໍ່ໄດ້ທີ່ການຈ້າງງານຂອງລັດຖະບານ ຈະມີເພີ່ມຂຶ້ນ. ຂະແໜງການທີ່ມີການຂະຫຍາຍໂຕໃນລະດັບໄວໄດ້ແກ່ອຸດສາຫະກຳປຸງແຕ່ງ, ພະລັງງານໄຟຟ້າ, ບໍ່ແຮ່, ກໍ່ສ້າງ, ການຄ້າ (ຂາຍຍົກ ແລະ ຂາຍຍ່ອຍ), ການສຶກສາ, ການບໍລິການດ້ານສາທາລະນະສຸກ ແລະ ການບໍລິການທາງດ້ານເສດຖະກິດ. ເຖິງຢ່າງໃດກໍ່ຕາມ, ບັນດາຂະແໜງການເຫຼົ່ານີ້ມີທ່າອ່ຽງ ຈະສ້າງວຽກເຮັດງານທຳ ໃນຈຳນວນພຽງພໍໃນອະນາຄົດອັນໃກ້ນີ້ໄດ້ ຫຼື ບໍ່? ຄ່າຄວາມຢືດຫົດຂອງການຈ້າງງານຕໍ່ການຜະລິດທີ່ຄິດໄລ່ຈາກການສຳຫຼວດປີ 1995 ຊີ້ໃຫ້ເຫັນຄຳຕອບຕໍ່ຄຳຖາມດັ່ງກ່າວກໍ່ຄື "ເປັນໄປໄດ້" ສຳລັບບາງກິດຈະກຳ ແລະ 'ເປັນໄປບໍ່ໄດ້' ສຳລັບບາງກິດຈະກຳ (ຕາຕະລາງ 3.2)[44].

## ຂະແໜງອຸດສາຫະກຳ

ຜົນຜະລິດຂອງຂະແໜງອຸດສາຫະກຳມີການຂະຫຍາຍໂຕສະເລ່ຍ 11% ຕໍ່ປີ ໃນໄລຍະ 1990-2007; ໃນນັ້ນ, ປະກອບມີ

44 ຄວາມຢືດຫົດແມ່ນວັດແທກຂະໜາດຂອງການປ່ຽນແປງຂອງຕົວປ່ຽນໜຶ່ງຍ້ອນມີການປ່ຽນແປງຂອງຕົວປ່ຽນອີກຕົວປ່ຽນໜຶ່ງ. ອັດຕາສ່ວນການປ່ຽນແປງແມ່ນວັດແທກເປັນ % ຫຼາຍກວ່າຈະເປັນຕົວເລກເຕັມ ເພື່ອບໍ່ໃຫ້ຫົວໜ່ວຍວັດແທກມີຜົນກະທົບຕໍ່ກັບຄ່າຄວາມຫົດຢືດ. ຖ້າຄ່າຄວາມຫົດຢືດເທົ່າກັບ 1, ການຈ້າງງານເພີ່ມຂຶ້ນໃນສັດສ່ວນທີ່ເທົ່າກັບການເພີ່ມຂຶ້ນຂອງການຜະລິດ; ຖ້ານ້ອຍກວ່າ 1, ແມ່ນການຈ້າງງານເພີ່ມຂຶ້ນນ້ອຍກວ່າ ແລະ ຖ້າໃຫຍ່ກວ່າ 1 ແມ່ນການຈ້າງງານເພີ່ມຂຶ້ນຫຼາຍກວ່າ. ຄວາມຫົດຢືດຂອງການຜະລິດຕໍ່ກັບການຈ້າງງານແມ່ນບໍ່ຂຶ້ນກັບວ່າອຸດສາຫະກຳ ຫຼື ກິດຈະກຳຈະເປັນລັກສະນະເຂັ້ມແຮງງານ ຫຼື ເຂັ້ມທຶນ. (ແຫຼ່ງຂໍ້ມູນ: http://en.wikipedia.org/wiki/Price_elasticity_of_demand) ຄ່າຄວາມຫົດຢືດ ແມ່ນຄິດໄລ່ຈາກຂໍ້ມູນການສຳຫຼວດພົນລະເມືອງ ແລະ ທີ່ຢູ່ອາໄສ ປີ 1995 ແລະ ການສຳຫຼວດເສດຖະກິດ ປີ 2006 ສຳລັບຂໍ້ມູນການຈ້າງງານ ແລະ ຈາກຊຸດຂໍ້ມູນລາຍຮັບແຫ່ງຊາດສຳລັບຂໍ້ມູນການຜະລິດໃນບົດນີ້.

**ຮູບສະແດງ 3.4: ອັດຕາສ່ວນແຮງງານ ແຈກຢາຍຕາມກຸ່ມອຸດສາຫະກຳໃນຂະແໜງ ທີ່ບໍ່ແມ່ນກະສິກຳແບບຄອບຄົວ (2005-2006)**




***ແຫຼ່ງຂໍ້ມູນ:** ການສຳຫຼວດເສດຖະກິດປີ 2006 (EC06) (GOL (2007c)) ແລະ ການສຳຫຼວດພົນລະເມືອງ ແລະ ທີ່ຢູ່ອາໄສປີ 2005 (GOL (2006a)); ສຳລັບກະສິກຳ ແມ່ນໝາຍເຖິງການຜະລິດກະສິກຳເພື່ອການຄ້າທີ່ບໍ່ລວມເອົາການຜະລິດແບບຄອບຄົວ.*

ຂະແໜງບໍ່ແຮ່, ອຸດສາຫະກຳປຸງແຕ່ງ, ກໍ່ສ້າງ, ໄຟຟ້າ (ລວມທັງອາຍແກັດສ, ນ້ຳ ແລະ ການບຳບັດນ້ຳ). ຂະແໜງການນີ້ ມີອັດຕາສ່ວນກວມເອົາ 23.2% ຂອງການຈ້າງງານໃນຂະແໜງການທີ່ບໍ່ແມ່ນກະສິກຳທັງໝົດ. ຄ່າຄວາມຢືດຫົດຂອງການຈ້າງງານຕໍ່ການຜະລິດແມ່ນ 0.57, ສູງກວ່າການຜະລິດກະສິກຳແບບຄອບຄົວແຕ່ກໍ່ຍັງບໍ່ທັນສູງພໍທີ່ຈະຮອງຮັບແຮງງານໄດ້ຢ່າງໄວວາ.

### ຂະແໜງບໍ່ແຮ່

ຜົນຜະລິດຂອງຂະແໜງການບໍ່ແຮ່ ຂະຫຍາຍໂຕເກືອບ 100 ເທົ່າໃນໄລຍະເວລາ 5 ປີ 2002-2007 ແລະ ການປະກອບສ່ວນຂອງຂະແໜງການນີ້ຕໍ່ລວມຍອດຜະລິດຕະພັນພາຍໃນ ເພີ່ມຂຶ້ນມາຢູ່ໃນລະດັບ 12% ໃນປີ 2007[45]. ສັດສ່ວນຂອງການລົງທຶນໃນຂະແໜງບໍ່ແຮ່ ຕໍ່ກັບມູນຄ່າການລົງທຶນໂດຍລວມ ໃນໄລຍະປີ 2003-2007 (ສະເລ່ຍ 5 ປີ) ແມ່ນມີປະມານ 10%. ຂະແໜງການນີ້ ມີຄ່າຄວາມຢືດຫົດຂອງການຈ້າງງານຕໍ່ການຜະລິດເທົ່າກັບ 0.29 ແລະ ຖ້າສັງເກດຈາກການຈ້າງງານແລ້ວຈະເຫັນວ່າເປັນໂຕເລກທີ່ຍັງຕ່ຳ. ຂະແໜງບໍ່ແຮ່ນີ້ມີການຈ້າງງານ 1.3% ຂອງແຮງງານທັງໝົດໃນຂະແໜງທີ່ບໍ່ແມ່ນກະສິກຳ ຫຼື ເທົ່າກັບ 0.28% ຂອງແຮງງານຢູ່ໃນເສດຖະກິດ. ຖ້າຄິດໄລ່ເປັນຈຳນວນສູງສຸດແມ່ນມີບໍ່ເກີນ 8,000 ຄົນ. ບໍລິສັດຂຸດຄົ້ນບໍ່ແຮ່ລ້ານຊ້າງມິເນໂລນຈຳກັດ (LXML) ໃນແຂວງສະຫວັນນະເຂດ ແມ່ນບໍລິສັດໃຫຍ່ທີ່ສຸດໃນປະເທດ ໂດຍມີກຳໄລປະມານ 500 ລ້ານໂດລາຕໍ່ປີ. ຂະແໜງການນີ້ ຈ້າງງານໜ້ອຍກວ່າ 5,800 ຄົນ (2,800 ຄົນແມ່ນແຮງງານປົກກະຕິ, 3000 ຄົນແມ່ນແຮງງານບໍ່ປະຈຳ ແລະ ປະມານ 600 ຄົນແມ່ນຊ່ຽວຊານຕ່າງປະເທດ)[46]. ແຮງງານ

**ຕາຕະລາງ 3.2: ຄ່າຄວາມຢືດຫົດຂອງການຈ້າງງານຕໍ່ການຜະລິດ, ຕາມຂະແໜງການລວມ ປີ 1995 -2006**

| | ຂະແໜງການ/ກິດຈະກຳ | ຄ່າຄວາມຫົດຢືດຂອງການຈ້າງງານຕໍ່ການຜະລິດ |
|---|---|---|
| 1 | ລວມ | 0.40 |
| 2 | ກະສິກຳ | 0.37 |
| 3 | ບໍ່ແມ່ນກະສິກຳ | 0.79 |
| 4 | ອຸດສາຫະກຳ | 0.57 |
| 5 | ບໍ່ແຮ່ | 0.29 |
| 6 | ປຸງແຕ່ງ + ກໍ່ສ້າງ | 0.63 |
| 7 | ໄຟຟ້າ, ອາຍແກັດ ແລະ ນ້ຳ | 0.38 |
| 8 | ບໍລິການ | 0.94 |
| 9 | ຄ້າຂາຍຍົກ ແລະ ຍ່ອຍ | 0.73 |
| 10 | ໂຮງແຮມ ແລະ ຮ້ານອາຫານ | 1.32 |
| 11 | ອື່ນໆ | n.a. |

***ແຫຼ່ງຂໍ້ມູນ:** ຄິດໄລ່ຈາກຂໍ້ມູນລາຍຮັບແຫ່ງຊາດ ຈາກກົມສະຖິຕິ ສຳລັບການຜະລິດ; ແລະ EC06 ແລະ ການສຳຫຼວດພົນລະເມືອງ ແລະ ທີ່ຢູ່ອາໄສ*

45 ຕັ້ງແຕ່ປີ 2000, ການປະກອບສ່ວນຂອງຂະແໜງການທີ່ອາໄສຊັບພະຍາກອນທຳມະຊາດຕໍ່ກັບລວມຍອດຜະລິດຕະພັນພາຍ ໃນ (GDP) ໄດ້ເພີ່ມຂຶ້ນຈາກ 25% ມາເປັນ 45 % . ເບິ່ງ GOL-UNDP 2008, ໜ້າ. 23.

46 ແຫຼ່ງຂໍ້ມູນ: ບົດສະເໜີຂອງຜູ້ຕາງໜ້າບໍລິສັດລ້ານຊ້າງມິເນີໂລນ ທີ່ ກະຊວງແຜນການ ແລະ ການລົງທຶນ, ໃນຫົວຂໍ້ "ການປະ ກອບສ່ວນທາງດ້ານເສດຖະກິດຂອງ ໂຄງການຂຸດຄົ້ນບໍ່ແຮ່ລ້ານຊ້າງມິນິໂລນ ລາວ", ເອກະສານ ໜ້າ 5, ວັນທີ 1 ເມສາ, 2008. ຕົວເລກທີ່ບໍລິສັດອ້າງອີງກ່ຽວກັບຜົນຜະລິດອາດບໍ່ຈະແຈ້ງແຕ່ຕົວເລກແຮງງານແມ່ນຖືກຕ້ອງ.



ການຂົນສົ່ງທາງນ້ຳສາມາດເປັນໜຶ່ງກິດຈະກຳທີ່ສ້າງລາຍຮັບນອກລະດູກະສິກຳ

ລາວສ່ວນໃຫຍ່ແມ່ນເຮັດວຽກກ່ຽວກັບການບຸກເບີກທີ່ດິນກະສິກຳ ຊຶ່ງເປັນວຽກທີ່ມີລາຍຮັບຕ່ຳ ແລະ ບໍ່ແຕກຕ່າງຈາກວຽກທີ່ບໍ່ມີສີມືໃນເຂດຊົນນະບົດ. ນອກນີ້ ກໍ່ຍັງມີການຂຸດຄົ້ນບໍ່ແຮ່ຂະໜາດນ້ອຍ ແລະ ມີທ່າແຮງສຳລັບການຈ້າງງານສູງ, ແຕ່ກິດຈະກຳດັ່ງກ່າວ ແມ່ນມີໜ້ອຍຫຼາຍ. ເຖິງຢ່າງໃດກໍ່ຕາມ, ວຽກບໍ່ແຮ່ລວມມີການຂຸດດິນ, ທຸບຫີນ ແລະ ເຄື່ອນຍ້າຍແຮ່ ຊຶ່ງບໍ່ແຕກຕ່າງກັບວຽກທີ່ບໍ່ຕ້ອງການສີມື ເຖິງແມ່ນວ່າ ຄ່າແຮງງານຈະສູງກວ່າຄ່າແຮງໃນກະສິກຳກໍ່ຕາມ.

ການຂຸດຄົ້ນບໍ່ແຮ່ຕາມຮູບແບບທີ່ມີໃນປະຈຸບັນ ແມ່ນບໍ່ມີທ່າແຮງໃນການສ້າງວຽກເຮັດງານທຳ, ແຕ່ກໍ່ສາມາດຊ່ວຍສົ່ງເສີມການພັດທະນາມະນຸດ (ຜ່ານການຈ້າງງານ ແລະ ຊ່ອງທາງອື່ນ) ຖ້າເງື່ອນໄຂຕ່າງໆຂ້າງລຸ່ມນີ້ໄດ້ຮັບການຕອບສະໜອງ:

1. ຖ້າວ່າເຮົາສາມາດຂະຫຍາຍວຽກງານບໍ່ແຮ່ ໃຫ້ກວມເອົາອຸດສາຫະກຳປາຍນ້ຳ ຫຼື ອຸດສາຫະກຳເຊື່ອມຕໍ່ຕ່າງໆ ທີ່ແຮງງານລາວຈຳນວນຫຼາຍ ສາມາດມີສ່ວນຮ່ວມໃນການເຮັດວຽກໄດ້ຫຼາຍຂຶ້ນ ແທນທີ່ຈະເຮັດແຕ່ວຽກຂຸດເອົາແຮ່ພຽງຢ່າງດຽວກໍ່ຈະເຮັດໃຫ້ສາມາດຍາດແຍ່ງເອົາມູນຄ່າເພີ່ມໃຫ້ແກ່ລາວເຮົາໄດ້ ພ້ອມທັງສາມາດສ້າງໃຫ້ມີວຽກເຮັດງານທຳຫຼາຍຂຶ້ນ. ການສ້າງຫົວໜ່ວຍທຸລະກິດເຮັດວຽກງານປຸງແຕ່ງ (ເຊັ່ນ ວິສາຫະກິດຂະໜາດນ້ອຍ ແລະ ຂະໜາດກາງ ຫຼື ອື່ນໆ ດີແທ້ ແມ່ນໃຫ້ພາກເອກະຊົນພາຍໃນເປັນຜູ້ດຳເນີນ) ເພື່ອແປຮູບ ແລະ ນຳໃຊ້ວັດຖຸດິບ ກໍ່ຈະສາມາດຊ່ວຍໃນບັນຫານີ້ໄດ້. ທ່ານ Michael Porter ຢູ່ໃນໜັງສື 'Competitive Advantage of Nations' ໄດ້ກ່າວວ່າ ເຕັກໂນໂລຊີ ແມ່ນສາມາດເຂົ້າເຖິງໄດ້ທຸກບ່ອນເພື່ອສ້າງຄວາມໄດ້ປຽບແບບສົມທຽບ[47]. ເຖິງຢ່າງໃດກໍ່ຕາມ, ກຸນແຈຂອງບັນຫານີ້ ແມ່ນນອນຢູ່ໃນທ່າແຮງທີ່ຈະດຶງດູດເອົາເຕັກໂນໂລຊີ ໂດຍມີການຂະຫຍາຍ ແລະ ລົງເລິກການປູພື້ນຖານດ້ານທຶນມະນຸດເປັນເງື່ອນໄຂພື້ນຖານ. ນອກຈາກນີ້, ທະນາຄານ ຄວນຈະໃຫ້ການສະໜັບສະໜູນອຸດສາຫະກຳພາຍໃນ ຕາມຂໍ້ອ້າງອີງເພື່ອປົກປ້ອງ "ອຸດສາຫະກຳຂະໜາດນ້ອຍທີ່ຫາກໍ່ສ້າງໃໝ່".

2. ລາຍຮັບທີ່ໄດ້ຈາກຄ່າທຳນຽມ ຈາກການໃຫ້ສຳປະທານການຂຸດຄົ້ນບໍ່ແຮ່ ສາມາດແບ່ງປັນໃຫ້ແກ່ການລົງທຶນ ຕໍ່ກັບຫຼາຍໆອົງປະກອບຂອງການພັດທະນາມະນຸດ ແລະ ພື້ນຖານໂຄງລ່າງໄດ້. ຄຽງຄູ່ໄປພ້ອມກັບ ການລົງທຶນທີ່ກ່າວມາຂ້າງເທິງນັ້ນ, ອຸດສາຫະກຳ ທີ່ເຂັ້ມແຮງງານຫຼາຍ ກໍ່ຈະມີການຂະຫຍາຍໂຕໄປພ້ອມໆກັນ ແລະ ຈະຊ່ວຍສ້າງວຽກເຮັດງານທຳໃນຂະແໜງການທີ່ບໍ່ແມ່ນກະສິກຳໄດ້ ເປັນຈຳນວນຫຼາຍ. ຂະບວນການທັງໝົດແມ່ນຈະເພີ່ມຄວາມເຂັ້ມແຂງໃຫ້ແກ່ປະຊາຊົນ ແລະ ໃຫ້ທາງເລືອກທີ່ຫຼາກຫຼາຍຂຶ້ນແກ່ເຂົາເຈົ້າ.

3. ມີອາຊີບເສີມຫຼາຍຢ່າງເຊັ່ນ: ການຂົນສົ່ງ, ການສ້ອມແປງ, ບໍລິການດ້ານອາຫານ ແລະ ອື່ນໆ ສາມາດສົ່ງເສີມໃຫ້ຫຼາຍຂຶ້ນໃນລະດັບທ້ອງຖິ່ນເພື່ອສ້າງອາຊີບ ແລະ ເປີດກວ້າງສາຂາວຽກງານໃໝ່ໃຫ້ແກ່ແຮງງານທີ່ຢູ່ໃກ້ກັບໂຄງການ. ຖ້າຫາກສິ່ງນີ້ເປັນ

47 Porter (1998).

**ຮູບສະແດງ 3.5: ອັດຕາສ່ວນແຮງງານ ແຈກຢາຍຕາມກຸ່ມຍ່ອຍ ໃນຂະແໜງອຸດສາຫະກຳປຸງແຕ່ງ, 2005- 2006**




***ແຫຼ່ງຂໍ້ມູນ:** ຄິດໄລ່ຈາກການສຳຫຼວດເສດຖະກິດທົ່ວປະເທດ ປີ 2006 (GOL (2007c)).*

ໄປບໍ່ໄດ້ ໃນໂຄງການທີ່ກຳລັງດຳເນີນຢູ່ນັ້ນ, ຢູ່ໃນສັນຍາໃໝ່ ອາດຈະລວມເອົາເງື່ອນໄຂດັ່ງກ່າວເຂົ້ານຳໄດ້ ຍ້ອນວ່າຫຼາຍພື້ນທີ່ຂອງໂຄງການຍັງບໍ່ທັນໄດ້ເລີ່ມເຄື່ອນໄຫວວຽກງານ.

4. ຫາກເປັນໄປໄດ້ກໍ່ຄວນທົບທວນຄືນອັດຕາຄ່າທຳນຽມຊັບພະຍາກອນ. ຢ່າງໜ້ອຍກໍ່ຄວນທົບທວນຄືນໂຄງການທີ່ກຳລັງເຈລະຈາຕໍ່ລອງກັນຢູ່; ໂດຍອາດຈະນຳໃຊ້ທີ່ປຶກສາຈາກສາກົນ ເພື່ອຊ່ວຍສຶກສາບັນຫາ ກ່ຽວກັບຄ່າທຳນຽມຊັບພະຍາກອນ ແລະ ຜົນປະໂຫຍດອື່ນໆ. ເຖິງແມ່ນວ່າ ຄ່າບໍລິການທີ່ປຶກສານັ້ນຈະມີລາຄາສູງກໍ່ຕາມແຕ່ກໍ່ເປັນສິ່ງທີ່ຄຸ້ມຄ່າ. ໃນບາງດ້ານ, ອາດຈະນຳໃຊ້ການຊ່ວຍເຫຼືອຈາກອົງການສາກົນທີ່ມີຄວາມຮູ້ໃນດ້ານນີ້.

5. ເມື່ອພິຈາລະນາເຫັນຄວາມສຳຄັນຂອງ ຂະແໜງການບໍ່ແຮ່ຕໍ່ກັບເສດຖະກິດຂອງລາວເຮົາໃນອີກ 2-3 ທົດສະວັດຂ້າງໜ້າເຫັນວ່າການສ້າງສະຖາບັນກ່ຽວກັບບໍ່ແຮ່ເພື່ອທຳການຄົ້ນຄວ້າ ແລະ ສະໜອງການຝຶກອົບຮົມ ແມ່ນສິ່ງທີ່ສຳຄັນ ແລະ ຈຳເປັນ (ເບິ່ງເພີ່ມເຕີມໄດ້ຢູ່ບົດທີ 6). ນອກຈາກນັ້ນ, ກໍ່ຍັງຮຽກຮ້ອງໃຫ້ບໍລິສັດບໍ່ແຮ່ ຕ້ອງຖ່າຍທອດເຕັກໂນໂລຊີທີ່ສຳຄັນໃຫ້ແກ່ພະນັກງານວິຊາການພາຍໃນ.

### ຂະແໜງພະລັງງານໄຟຟ້ານ້ຳຕົກ

ໃນລະຫວ່າງປີ 1990 ຫາ 2007 ຜົນຜະລິດພະລັງງານໄຟຟ້ານ້ຳຕົກໄດ້ຂະຫຍາຍໂຕ 13.1% ຕໍ່ປີ. ຂະແໜງການດັ່ງກ່າວມີການຈ້າງງານສູງສຸດ 6,500 ຄົນ ແລະ ການລົງທຶນຕໍ່ຂະແໜງການນີ້ຢູ່ລາວແມ່ນ 51% (ສະເລ່ຍ 5 ປີ, 2003-2007)[48]. ຄ່າຄວາມຢືດຫົດ ຂອງການຈ້າງງານ ຕໍ່ການຜະລິດຂອງຂະແໜງການນີ້ ແມ່ນບໍ່ສູງປານໃດ ຄືຢູ່ໃນລະດັບ 0.38. ເຖິງຢ່າງໃດກໍ່ຕາມ, ມີທາງເລືອກອື່ນໜ້ອຍຫຼາຍ ໃນການສ້າງຕາຂ່າຍພະລັງງານເນື່ອງຈາກວ່າ ການຜະລິດໄຟຟ້ານ້ຳຕົກນີ້ ເປັນອຸດສາຫະກຳທີ່ໃຊ້ທຶນຫຼາຍ. ອຳນາດການປົກຄອງ ສາມາດນຳໃຊ້ບາດກ້າວດັ່ງຕໍ່ລົງລຸ່ມນີ້ເພື່ອເພີ່ມການຈ້າງງານໂດຍຜ່ານຂະແໜງການນີ້:

1. ນຳໃຊ້ພະລັງງານໃນຂະແໜງການນີ້ ຊຸກຍູ້ອຸດສາຫະກຳເຂື່ອນຕໍ່ຂະໜາດນ້ອຍຢູ່ໃນເຂດຊົນນະບົດ, ການປຸງແຕ່ງແຮ່ທາດ ແລະ ອື່ນໆ ນອກຈາກຈະໃຊ້ພຽງແຕ່ເປັນພະລັງງານໃຫ້ແກ່ເຄື່ອງຈັກສູບນ້ຳສຳລັບເຮັດຊົນລະປະທານຂະໜາດນ້ອຍເທົ່ານັ້ນ. ເວົ້າລວມແລ້ວ, ລາວເຮົາບໍ່ຄວນຜະລິດພະລັງງານໄຟຟ້າ ເພື່ອແນໃສ່ແຕ່ການສົ່ງອອກຢ່າງດຽວຄືດັ່ງທີ່ເປັນຢູ່ໃນປະຈຸບັນນີ້, ແຕ່ກໍ່ຄວນມີໄວ້ເພື່ອຊົມໃຊ້ໃນທ້ອງຖິ່ນນຳ ເພື່ອເພີ່ມຜົນປະໂຫຍດ ໃນດ້ານສະຫວັດດີການ ແລະ ຜົນປະໂຫຍດດ້ານອື່ນໆໃຫ້ໄດ້ຫຼາຍ.

2. ທົບທວນຄືນອັດຕາພາສີ ເພື່ອເພີ່ມເງື່ອນໄຂໃນການຂາຍພະລັງງານໃຫ້ປະເທດອື່ນ ແລະ ບໍລິສັດອື່ນ; ຢ່າງໜ້ອຍກໍ່ຄວນສ້າງເງື່ອນໄຂໃຫ້ໄດ້ອັດຕາທີ່ດີກວ່າໃນໂຄງການໃໝ່ທີ່ກຳລັງເຈລະຈາຢູ່. ລາຍຮັບທີ່ໄດ້ຈາກສິ່ງນີ້ ສາມາດນຳໄປສະໜັບສະໜູນການພັດທະນາພື້ນຖານໂຄງລ່າງ ແລະ ການພັດທະນາມະນຸດ.

3. ເຂື່ອນໄຟຟ້ານ້ຳຕົກຂະໜາດນ້ອຍແມ່ນໄດ້ກາຍເປັນທີ່ຍອມຮັບ. ການສົ່ງເສີມເຂື່ອນຂະໜາດນ້ອຍນີ້ ສາມາດເພີ່ມທະວີກິດຈະກຳທີ່ບໍ່ແມ່ນກະສິກຳ ແລະ ສາມາດສະໜອງພະລັງ

48 GOL (2008a).



ມີຄວາມຈຳເປັນໃນການ ສົ່ງເສີມວຽກທີ່ມີຄຸນນະພາບໃຫ້ຫລາຍຂື້ນ

ງານໃຫ້ແກ່ເຄື່ອງຈັກສູບນ້ຳຢູ່ໃນເຂດຫ່າງໄກສອກຫຼີກໄດ້. ຄວນໃຫ້ການຊຸກຍູ້ສົ່ງເສີມຫົວໜ່ວຍທຸລະກິດຂະໜາດນ້ອຍ ແລະ ກາງຂອງເອກະຊົນທ້ອງຖິ່ນ ຫຼື ຂອງກຸ່ມບ້ານລົງທຶນເຂົ້າໃນຂະແໜງພະລັງງານຮູບແບບດັ່ງກ່າວ.

## ອຸດສາຫະກຳປຸງແຕ່ງ

ຜົນຜະລິດຂອງອຸດສາຫະກຳປຸງແຕ່ງ (ລວມທັງການກໍ່ສ້າງ) ໄດ້ຂະຫຍາຍໂຕໃນອັດຕາສະເລ່ຍ 9.5% ຕໍ່ປີ ລະຫວ່າງປີ 1990 ແລະ 2007. ອຸດສາຫະກຳປະເພດນີ້ເປັນຂະແໜງການທີ່ໃຊ້ທຶນໜ້ອຍກວ່າ ແລະ ຄ່າຄວາມຢືດຫົດຂອງການຈ້າງງານຕໍ່ກັບການຜະລິດຂອງຂະແໜງການນີ້ມີສູງໃນລະດັບ 0.63 ແລະ ແນ່ນອນວ່າຖ້າຂະແໜງການນີ້ຂະຫຍາຍໂຕໄວ ກໍ່ຈະສາມາດຮອງຮັບເອົາແຮງງານໄດ້ຢ່າງໄວວາ. ບາງຂະແໜງການຕົ້ນຕໍ ຂອງອຸດສາຫະກຳປຸງແຕ່ງເຊັ່ນ: ການຜະລິດແຜ່ນແພ ແລະ ຕັດຫຍິບເສື້ອຜ້າ, ການປຸງແຕ່ງໄມ້ (ລວມທັງເຟີນີເຈີ), ປຸງແຕ່ງອາຫານ ແລະ ກໍ່ສ້າງໄດ້ສ້າງ ແລະ ສາມາດສ້າງວຽກເຮັດງານທຳຢ່າງຫຼວງຫຼາຍ. ຈາກຄວາມສຳຄັນຂອງຂະແໜງການດັ່ງກ່າວ, ພາກນີ້ຈະໄດ້ອະທິບາຍຫຍໍ້ຕື່ມອີກກ່ຽວກັບ 3 ຂະແໜງການທີ່ໄດ້ກ່າວມາຂ້າງເທິງນັ້ນ.

## ຂະແໜງຕັດຫຍິບ

ຜົນການສຳຫຼວດເສດຖະກິດປີ 2006 (EC06) ໄດ້ຊີ້ໃຫ້ເຫັນວ່າໃນລາວເຮົາ ມີບໍລິສັດຜະລິດແຜ່ນແພ/ເສື້ອຜ້າ ທັງໝົດ 2,545 ແຫ່ງ: ໃນນັ້ນມີບໍລິສັດໃຫຍ່ທີ່ມີແຮງງານແຕ່ 100 ຄົນຂຶ້ນໄປ 48 ແຫ່ງ (ໃນ 48 ບໍລິສັດນີ້ມີແຮງງານທັງໝົດປະມານ 21,048 ຄົນ), ບໍລິສັດຂະໜາດກາງ 130 ແຫ່ງທີ່ມີແຮງງານແຕ່ 10-99 ຄົນ (ມີແຮງງານທັງໝົດປະມານ 3,650 ຄົນ) ແລະ ສ່ວນທີ່ເຫຼືອ 2,367 ແຫ່ງແມ່ນຫົວໜ່ວຍທຸລະກິດທີ່ມີແຮງງານ ໜ້ອຍກວ່າ 10 ຄົນ (ມີແຮງງານທັງໝົດ 4,516 ຄົນ). ຫົວໜ່ວຍທຸລະກິດຂະໜາດນ້ອຍສ່ວນໃຫຍ່ ແມ່ນເຮັດສັນຍາຮັບເໝົາຍ່ອຍກັບບໍລິສັດໃຫຍ່ ໂດຍທີ່ບໍລິສັດໃຫຍ່ເປັນຜູ້ອອກແບບ ແລະ ຕັດ. ສ່ວນບໍລິສັດນ້ອຍແມ່ນເຮັດໜ້າທີ່ຫຍິບພາຍໃຕ້ສັນຍາຍ່ອຍ. ເນື່ອງຈາກວ່າ ລາວເຮົາ ມີຄວາມໄດ້ປຽບກໍ່ຄືມີຄ່າແຮງງານຖືກ (ແຕ່ທາງບໍລິສັດເອງກໍ່ອ້າງວ່າແຮງງານສ່ວນໃຫຍ່ຂາດທັກສະສີມື ແລະ ມີຜະລິດຕະພາບຕ່ຳ), ແລະ ມີລະບົບໂກຕາໃນການສົ່ງອອກ ໄປປະເທດຕາເວັນຕົກ (ແຕ່ປະຈຸບັນນີ້ກໍ່ໄດ້ໝົດໄປ). ສະນັ້ນ, ຂະແໜງການນີ້ຈຶ່ງບໍ່ມີການຂະຫຍາຍໂຕ. ການທີ່ນັກລົງທຶນ ບໍ່ໄດ້ສ້າງຕັ້ງໂຮງງານໃໝ່ໃນປະຈຸບັນຕາມອັດຕາທີ່ເຄີຍເປັນມາໃນສອງສາມປີກ່ອນນັ້ນ ບໍ່ເປັນສິ່ງທີ່ໜ້າແປກໃຈເລີຍ. ອັດຕາສ່ວນການລົງທຶນໃນຂະແໜງການນີ້ ໃນລະຫວ່າງປີ 2006-2007 (ສະເລ່ຍ 2 ປີ) ກວມພຽງແຕ່ 0.5% ຂອງການລົງທຶນທັງໝົດໃນ ສປປ ລາວ. ຂະແໜງການນີ້ ຍັງໄດ້ຮັບຄວາມກົດດັນຈາກບາງບັນຫາ ເຊັ່ນ: ການຂາດການສະໜັບສະໜູນທາງການເງິນ, ຂາດການເຊື່ອມຕໍ່ທາງດ້ານການຜະລິດເພື່ອຮອງຮັບ ແລະ ສະໜັບສະໜູນການຜະລິດຕໍ່ເນື່ອງ, ຄ່າຂົນສົ່ງ ແລະ ອັດຕາພາສີແພງ[49]. ບາງບໍລິສັດໄດ້ເລີ່ມປິດກິດຈະການ ແລະ ຍ້າຍໄປປະເທດອື່ນ.

ສະນັ້ນ, ຈຶ່ງມີຄວາມຈຳເປັນໃຫ້ມີນະໂຍບາຍລະອຽດຄົບຖ້ວນເພື່ອຟື້ນຟູຂະແໜງການນີ້. ເຖິງແມ່ນວ່າ ການຄົ້ນຄວ້າຢ່າງລະອຽດແມ່ນ

49 ໂຮງງານທີ່ຜະລິດສິນຄ້າເພື່ອສົ່ງອອກຕ້ອງເສຍພາສີການຜະລິດ 3-5 %. ໃນກໍລະນີຂອງຫວຽດນາມ ແມ່ນບໍ່ມີພາສີດັ່ງກ່າວ ເຊິ່ງເປັນຄູ່ແຂ່ງທີ່ສຳຄັນ, ຄຳຕໍ່ວ່າຈາກຜູ້ສົ່ງອອກ.



ການສົ່ງເສີມ ອຸດສະຫະກຳທີ່ສ້າງມູນຄ່າເພີ້ມໃຫ້ຊັບພະຍາກອນທຳມະຊາດສາມາດສ້າງຄວາມ ໄດ້ປຽບໃຫ້ແກ່ ສປປ ລາວ

ສິ່ງທີ່ຈຳເປັນເພື່ອວາງນະໂຍບາຍດັ່ງກ່າວ, ແຕ່ການສົນທະນາປຶກສາຫາລືກັບຜູ້ຜະລິດໄດ້ສ່ອງແສງໃຫ້ເຫັນບາງທິດທາງດັ່ງລຸ່ມນີ້:

1. ການຍົກລະດັບຜະລິດຕະພາບຂອງແຮງງານເປັນສິ່ງທີ່ມີຄວາມຈຳເປັນຮີບດ່ວນ. ສະນັ້ນ, ຕໍ່ກັບບັນຫານີ້ ຄວນຈັດຕັ້ງການຝຶກອົບຮົມເພື່ອຍົກລະດັບໃຫ້ສູງຂຶ້ນ ແລະ ດີທີ່ສຸດກໍ່ແມ່ນຜ່ານການຮ່ວມມືລະຫວ່າງບໍລິສັດຕັດຫຍິບ ແລະ ສະຖາບັນຝຶກອົບຮົມວິຊາຊີບ. ເພື່ອຫຼຸດຜ່ອນການອອກວຽກຂອງພະນັກງານ, ພະນັກງານທຸກຄົນຕ້ອງໄດ້ເຮັດສັນຍາແຮງງານ ກໍ່ຄື: ຖ້າເຂົາເຈົ້າອອກວຽກກ່ອນໄລຍະເວລາໃດໜຶ່ງທີ່ກຳນົດໄວ້ໃນສັນຍາຕ້ອງໄດ້ຮັບການປັບໃໝ.

2. ກຸ່ມບໍລິສັດຕັດຫຍິບຄິດວ່າ ລັດຖະບານຄວນຫຼຸດຜ່ອນພາສີຕໍ່ໄປຢ່າງໜ້ອຍໃນອີກ 2-3 ປີຂ້າງໜ້າ. ຄວນມີການສຶກສາຢ່າງລະອຽດກ່ຽວກັບການຫຼຸດຜ່ອນພາສີ ຫຼື ການໃຫ້ສິ່ງຈູງໃຈໃນຮູບການອື່ນທີ່ສາມາດຊ່ວຍເພີ່ມຄວາມໝັ້ນຄົງໃຫ້ແກ່ຂະແໜງການນີ້ຢູ່ໃນ ສປປ ລາວ.

3. ບໍລິສັດພົບພໍ້ບັນຫາການຈຳໜ່າຍຕາມລະດູການ ຊຶ່ງເຮັດໃຫ້ຕົ້ນທຶນຕໍ່ຫົວໜ່ວຍການຜະລິດເພີ່ມຂຶ້ນເນື່ອງຈາກຕົ້ນທຶນຄົງທີ່ ແລະ ຄ່າແຮງງານແມ່ນບໍ່ສາມາດເຈລະຈາຕໍ່ລອງກັນໄດ້. ການເພີ່ມຄວາມຫຼາກຫຼາຍຂອງສິນຄ້າສາມາດຫຼຸດຜ່ອນຜົນກະທົບຂອງການຈຳໜ່າຍຕາມລະດູການ ແລະ ການຮັບວຽກມອບເໝົາພາຍໃຕ້ສັນຍາຍ່ອຍກັບບໍລິສັດໃຫຍ່ຂອງໄທ ແລະຈີນກໍ່ຈະສາມາດຊ່ວຍບັນຫານີ້ໄດ້[50].

4. ຕ້ອງຫຼຸດຕົ້ນທຶນໃນການຂົນສົ່ງລົງ: ສຳລັບບັນຫານີ້, ນອກຈາກການປັບປຸງພື້ນຖານໂຄງລ່າງແລ້ວຂັ້ນຕອນບໍລິຫານໃນການກວດກາສິນຄ້າຢູ່ດ່ານກໍ່ຄວນໃຫ້ໃຊ້ເວລາສັ້ນລົງ.ວິທີໜຶ່ງທີ່ສາມາດຊ່ວຍໄດ້ກໍ່ຄື ການເຮັດສັນຍາ ກັບ ລັດຖະບານໄທເພື່ອອະນຸຍາດໃຫ້ລົດບັນທຸກຂອງລາວທີ່ໄດ້ຮັບການອະນຸມັດຈາກລັດຖະບານລາວ ສາມາດເດີນທາງໄປທ່າເຮືອຂອງໄທໂດຍບໍ່ຕ້ອງຜ່ານການກວດກາຫຼາຍເທື່ອໃນເວລາເດີນທາງ.

## ຜະລິດຕະພັນໄມ້/ເຄື່ອງເຟີນີເຈີ

ຜົນການສຳຫຼວດເສດຖະກິດປີ 2006 ເຫັນວ່າໃນຂະແໜງໄມ້/ເຟີນີເຈີ ແມ່ນມີ 2,923 ຫົວໜ່ວຍທຸລະກິດທີ່ໄດ້ຮັບການສ້າງຕັ້ງຂຶ້ນ, ໃນນັ້ນ ມີໂຮງງານໃຫຍ່ 28 ແຫ່ງທີ່ຈ້າງແຮງງານຫຼາຍກວ່າ 100 ຄົນ (ມີແຮງງານທັງໝົດ 5,234 ຄົນໃນ 28 ໂຮງງານ), ໂຮງງານທີ່ມີແຮງງານ 10-99 ຄົນ ມີ 292 ແຫ່ງ (ມີແຮງງານທັງໝົດ 9,003 ຄົນ) ແລະ ທີ່ເຫຼືອອີກ 2,603 ແຫ່ງ ແມ່ນມີແຮງງານໜ້ອຍກວ່າ 10 ຄົນ (ມີແຮງງານທັງໝົດ 7,054 ຄົນ). ຂະແໜງການນີ້ ມີທ່າແຮງໃນການຂະຫຍາຍໂຕດີ ເນື່ອງຈາກວ່າລາວເຮົາ ມີຂະແໜງການຜະລິດໄມ້ທ່ອນທີ່ຂະຫຍາຍໂຕ. ແຕ່ການຂະຫຍາຍໂຕດັ່ງກ່າວ ຍັງບໍ່ທັນເກີດຂຶ້ນໃນປະຈຸບັນ ເນື່ອງຈາກວ່າໄມ້ທີ່ຍັງບໍ່ທັນຜ່ານການແປຮູບ ຫຼື ເຄິ່ງການແປຮູບຈຳນວນຫຼວງຫຼາຍແມ່ນຖືກສົ່ງອອກ ຈຶ່ງເຮັດໃຫ້ໂຮງງານແປຮູບພາຍໃນ ມີວັດຖຸດິບບໍ່ພຽງພໍ. ການຂາດແຄນແຮງງານທີ່ມີທັກສະສີມື, ມີຄວາມຮູ້

50 ເຖິງຢ່າງໃດກໍ່ຕາມ, ການຕັດສິນໃຈດັ່ງກ່າວແມ່ນມາຈາກບໍລິສັດ, ສິ່ງທີ່ລັດຖະບານສາມາດເຮັດໄດ້ດີທີ່ສຸດກໍ່ແມ່ນໃຫ້ຄຳແນະນຳ ແລະ ພະຍາຍາມລຶບລ້າງອຸປະສັກທີ່ກີດຂວາງເຂົາເຈົ້າໃນການເຮັດສິ່ງດັ່ງກ່າວ.



ສປປ ລາວ ສາມາດ ເພີ່ມລາຍຮັບໄດ້ຢ່າງຫຼວງຫຼາຍ ໂດຍການສົ່ງເສີມການປຸງແຕ່ງປາ ແລະ ການຕະຫຼາດ

ແລະ ປະສົບການຕ່ຳ, ມີຫົວຄິດປະດິດສ້າງ ດ້ານການເຮັດທຸລະກິດທີ່ຈຳກັດ ແລະ ຄວາມຈຳກັດໃນຕະຫຼາດສາກົນ ກໍ່ແມ່ນບັນຫາກີດໜ່ວງການຂະຫຍາຍໂຕຂອງຂະແໜງການ.

1. ການສົ່ງອອກໄມ້ບໍ່ວ່າຈະເປັນຮູບແບບແປຮູບ ຫຼື ບໍ່ແປຮູບກໍ່ຕາມ, ຖ້າບໍ່ຢູ່ໃນລາຍການສິນຄ້າຫ້າມສົ່ງອອກກໍ່ຄວນຈັດຢູ່ໃນລາຍການສົ່ງອອກທີ່ມີບູລິມະສິດຕ່ຳ. ບໍລິສັດໄມ້ແປຮູບ ແລະ ເຟີນີເຈີພາຍໃນປະເທດຄວນໄດ້ຮັບໄມ້ທີ່ດີ ແລະ ມີປະລິມານພຽງພໍ. ສຳລັບບັນຫານີ້, ຕ້ອງມີຄວາມລະມັດລະວັງ ແລະ ຕ້ອງປະຕິບັດກົດລະບຽບຕໍ່ກັບການຄ້ານອກລະບົບ ໂດຍສະເພາະຢູ່ໃນບັນດາແຂວງຊາຍແດນ.

2. ມີຄວາມຈຳເປັນຕ້ອງໄດ້ຍົກລະດັບຄຸນນະພາບຂອງສິນຄ້າ ແລະ ຜະລິດຕະພາບຂອງແຮງງານ. ສຳລັບບັນຫານີ້, ຄວນເພີ່ມການຝຶກອົບຮົມ ແລະ ດີທີ່ສຸດ ກໍ່ແມ່ນຜ່ານການຮ່ວມມືລະຫວ່າງບໍລິ ສັດໄມ້ແປຮູບ ແລະ ເຟີນີເຈີ ແລະ ສະຖາບັນຝຶກອົບຮົມວິຊາຊີບ. ເພື່ອຫຼຸດຜ່ອນການອອກວຽກຂອງພະນັກງານ, ພະນັກງານທຸກຄົນຕ້ອງໄດ້ເຮັດສັນຍາແຮງງານທີ່ລະບຸວ່າຖ້າເຂົາເຈົ້າອອກວຽກກ່ອນໄລຍະເວລາໃດໜຶ່ງ ທີ່ກຳນົດໄວ້ໃນສັນຍາຕ້ອງຖືກປັບໃໝ, ແຕ່ກໍ່ຕ້ອງໄດ້ຮັບການປົກປ້ອງພາຍໃຕ້ກົດໝາຍລາວ.

3. ຄວາມພະຍາຍາມໃນການເຊື່ອມໂຍງກັບຕະຫຼາດສາກົນ ໂດຍຜ່ານການເຮັດສັນຍາໄລຍະຍາວ ສາມາດຊ່ວຍໃນເລື່ອງການຕະຫຼາດສິນຄ້າໄດ້. ສະມາຄົມເຟີນີເຈີ ສາມາດມີບົດບາດໃນການຊີ້ນຳໃນເລື່ອງດັ່ງກ່າວນີ້.

### ການປຸງແຕ່ງອາຫານ

ຜົນການສຳຫຼວດເສດຖະກິດປີ 2006 ລະບຸວ່າ ໃນຂະແໜງການປຸງແຕ່ງອາຫານມີຫົວໜ່ວຍທຸລະກິດທີ່ໄດ້ຮັບການສ້າງຕັ້ງຂຶ້ນທັງໝົດ 15,804 ແຫ່ງ, ໃນນັ້ນ 28 ແຫ່ງແມ່ນໂຮງງານຂະໜາດໃຫຍ່ທີ່ຈ້າງແຮງງານຫຼາຍກວ່າ 100 ຄົນ (ມີແຮງງານທັງໝົດ 2,242 ຄົນ), 171 ແຫ່ງແມ່ນໂຮງງານຂະໜາດກາງທີ່ມີແຮງງານ 10-99 ຄົນ (ມີແຮງງານທັງໝົດ 3,033 ຄົນ) ແລະ ອີກ 15,625 ແຫ່ງແມ່ນໂຮງງານຂະໜາດນ້ອຍ ທີ່ມີແຮງງານໜ້ອຍກວ່າ 10 ຄົນ (ມີແຮງງານທັງໝົດ 26,578 ຄົນ). ຂະແໜງການນີ້ມີທ່າແຮງໃນການຂະຫຍາຍໂຕ ເຊັ່ນດຽວກັນ ເນື່ອງຈາກວ່າປະເທດເຮົາມີຄວາມອຸດົມສົມບູນໄປດ້ວຍພືດ, ຜັກ ແລະ ໝາກໄມ້ຫຼາກຫຼາຍຊະນິດລວມທັງສັດລ້ຽງ. ເຖິງຢ່າງໃດກໍ່ຕາມ, ເນື່ອງຈາກຊາວກະສິກອນລາວສ່ວນໃຫຍ່ ບໍ່ໄດ້ຜະລິດເພື່ອເປັນສິນຄ້າ ຈຶ່ງເຮັດໃຫ້ອຸດສາຫະກຳປຸງແຕ່ງອາຫານພົບກັບບັນຫາການຂາດດ້ານວັດຖຸດິບ ເຊັ່ນ: ບາງບ່ອນກໍ່ສາມາດເຮັດການຜະລິດໄດ້ພຽງແຕ່ 50% ຂອງຂີດຄວາມອາດສາມາດ. ນອກນັ້ນ ກໍ່ຍັງມີບັນຫາກ່ຽວກັບລະດູການກໍ່ຄືວັດຖຸດິບພາຍໃນ ແມ່ນສາມາດຜະລິດໄດ້ໃນບາງລະດູການເທົ່ານັ້ນ ແລະ ລະບົບການຂົນສົ່ງໃນປະຈຸບັນ ກໍ່ບໍ່ສາມາດຂົນສົ່ງວັດຖຸດິບໃນໄລຍະທາງໄກໄດ້ຢ່າງມີປະສິດທິຜົນ. ສະຫຼຸບແລ້ວ, ຊາວກະສິກອນສ່ວນໃຫຍ່ພົບວ່າ ການຂາຍຜົນຜະລິດໃຫ້ແກ່ໂຮງງານປຸງແຕ່ງຂອງປະເທດເພື່ອນບ້ານ ໄດ້ກຳໄລດີກວ່າຂາຍຢູ່ພາຍໃນປະເທດ ໂດຍສະເພາະກໍ່ແມ່ນ ຢູ່ຕາມແຂວງຊາຍແດນ. ຖ້າວ່າຈະເພີ່ມການຜະລິດເພື່ອສົ່ງອອກ, ຂະແໜງການນີ້ຈຳເປັນຕ້ອງມີຄວາມສາມາດແຂ່ງຂັນໃນລະດັບສາກົນ. ບາງແນວຄວາມຄິດທີ່ໄດ້ຈາກປະສົບການຂອງຕ່າງປະເທດມີດັ່ງນີ້:

1. ເຮັດສັນຍາການຜະລິດ–ເບິ່ງລາຍລະອຽດໃນຕອນທ້າຍຂອງພາກນີ້,

2. ຂະຫຍາຍຂະໜາດຂອງວິສາຫະກິດປຸງແຕ່ງອາຫານ–ເບິ່ງລາຍລະອຽດໃນຕອນທ້າຍຂອງພາກນີ້,

3. ປັບປຸງຄຸນນະພາບຂອງສິນຄ້າ, ໂດຍການຢັ້ງຢືນຄຸນນະພາບຈາກສາກົນ (ເຊັ່ນ ISO, HACCP) ແລະ ເຮັດສັນຍາຍ່ອຍກັບບໍລິສັດການຕະຫຼາດທີ່ສຳຄັນໃນຂົງເຂດອາຊຽນ,

4. ຫຼຸດຄ່າຂົນສົ່ງ [ລາຍລະອຽດໃນຂໍ້ (໗) ໃນຫົວຂໍ້ ‘ຂະແໜງຕັດຫຍິບ’ ຢູ່ຂ້າງເທິງ], ແລະ

5. ຂະຫຍາຍການເຊື່ອມໂຍງກັບຕະຫຼາດສາກົນ ໂດຍການເຮັດສັນຍາໄລຍະຍາວ ອາດສາມາດຊ່ວຍຂະຫຍາຍຕະຫຼາດຜົນຜະລິດ ຊຶ່ງສະມາຄົມຜູ້ຜະລິດ ສາມາດມີບົດບາດສຳຄັນໃນວຽກງານນີ້.

**ຮູບສະແດງ 3.6: ອັດຕາສ່ວນແຮງງານແຈກຢາຍຕາມກຸ່ມຍ່ອຍໃນຂະແໜງບໍລິການ, ປີ 2005-2006**




***ແຫຼ່ງຂໍ້ມູນ:*** *ການສຳຫຼວດເສດຖະກິດທົ່ວປະເທດ ປີ 2006; ແລະ ຂໍ້ມູນຈາກຂະແໜງການກ່ຽວຂ້ອງອື່ນໆ.*

ໝາຍເຫດ: ນອກຈາກນີ້ແລ້ວ ກໍ່ຍັງມີຄວາມເປັນໄປໄດ້ໃນການພັດທະນາອຸດສາຫະກຳອື່ນໆ ເຊັ່ນ ວິສະວະກຳກົນຈັກຂະໜາດນ້ອຍ ແລະ ການປະສົມໂລຫະ. ໃນປະຈຸບັນ, ບໍລິສັດວິສະວະກຳກົນຈັກຈາກຕ່າງປະເທດໄດ້ລິເລີ່ມປະກອບເຄື່ອງຈັກຢູ່ແຂວງສະຫວັນນະເຂດ. ດັ່ງນັ້ນ, ຖ້າບໍລິສັດຕ່າງປະເທດເຫຼົ່ານັ້ນຫາກເຫັນໂອກາດລົງທຶນທີ່ດີຢູ່ລາວ ກໍ່ມີຄວາມເປັນໄປໄດ້ ທີ່ບໍລິສັດເອກະຊົນພາຍໃນຈະສາມາດເຮັດກິດຈະກຳດັ່ງກ່າວໄດ້ເຊັ່ນດຽວກັນ. ໃນການຊຸກຍູ້ໃຫ້ເກີດມີການພັດທະນາຂະແໜງການເຫຼົ່ານີ້ ແມ່ນຮຽກຮ້ອງໃຫ້ມີນະໂຍບາຍສົ່ງເສີມຈາກພາກລັດ.

## ຂະແໜງບໍລິການ

ຂະແໜງບໍລິການ ຂະຫຍາຍໂຕໃນລະດັບຊ້າກວ່າຂະແໜງອຸດສາຫະກຳ ໂດຍມີອັດຕາຂະຫຍາຍໂຕສະເລ່ຍ 6.8% ໃນໄລຍະປີ 1990-2007. ກິດຈະກຳໃນຂະແໜງການນີ້ ມີອັດຕາການໃຊ້ທຶນໃນລະດັບຕໍ່າກວ່າ ແລະ ມີອັດຕາການຈ້າງງານຕໍ່ຫົວໜ່ວຍຜົນຜະລິດສູງກວ່າ ຊຶ່ງສະແດງໃຫ້ເຫັນ ຄ່າຄວາມຍືດຫົດຂອງແຮງງານໃນລະດັບ 0.94. ດັ່ງນັ້ນ, ຂະແໜງການນີ້ ສາມາດສ້າງວຽກເຮັດງານທຳໄດ້ຫຼາຍກວ່າຂະແໜງອຸດສາຫະກຳ. ກິດຈະກຳທີ່ມີທ່າແຮງໃນຂະແໜງການບໍລິການມີຄື ການຄ້າ (ການຂາຍຍົກ ແລະ ຂາຍຍ່ອຍ), ການຂົນສົ່ງ, ການບໍລິການແບບມືອາຊີບ, ບໍລິການທ່ອງທ່ຽວ (ໂຮງແຮມ ແລະ ຮ້ານອາຫານ ຖືເປັນຕົວແທນໃຫ້ແກ່ຂະແໜງການທ່ອງທ່ຽວ), ສາທາລະນະສຸກ ແລະ ສຶກສາ (ຮູບສະແດງ 3.6). ເຖິງຢ່າງໃດກໍ່ຕາມ, ຕ້ອງຄຳນຶງສະເໝີວ່າຄຸນນະພາບຂອງວຽກງານ ຫຼື ລາຍຮັບຂອງຫຼາຍກິດຈະກຳໃນຂະແໜງບໍລິການ ແມ່ນບໍ່ສູງ. ດັ່ງນັ້ນ, ນະໂຍບາຍຂອງລັດຖະບານຄວນເອົາໃຈໃສ່ຕໍ່ບັນຫາຄວາມສາມາດ ໃນການຈ້າງງານ ແລະ ຄຸນນະພາບຂອງວຽກງານ ໄປຄຽງຄູ່ກັບ ການສົ່ງເສີມວຽກທີ່ມີປະສິດທິພາບໃນຂະແໜງບໍລິການດັ່ງກ່າວ.

ອັດຕາສ່ວນການຈ້າງງານຕໍ່ຫົວໜ່ວຍການຜະລິດສຳລັບຂະແໜງການຄ້າ ແມ່ນຢູ່ໃນລະດັບ 0.73 ຊຶ່ງສະແດງວ່າມີໂອກາດໃນການສ້າງວຽກເຮັດງານທຳໄດ້ຫຼາຍ ຈາກການພັດທະນາຂະແໜງການຄ້າ. ເນື່ອງຈາກວ່າກິດຈະກຳນີ້ມີອັດຕາການໃຊ້ທຶນໃນລະດັບຕໍ່າ, ດັ່ງນັ້ນ ຂະແໜງການຄ້າຂາຍ ຈຶ່ງຂະຫຍາຍໂຕທົ່ວປະເທດໃນຮູບແບບຂອງຮ້ານຄ້າຂາຍຍ່ອຍຫຼາຍພັນແຫ່ງ ແລະ ມີການສ້າງວຽກເຮັດງານທຳຫຼາຍເປັນອັນດັບສອງ ໃນຂະແໜງບໍລິການ. ຖ້າຫາກວ່າມີການຜະລິດສິນຄ້າກະສິກຳ ແລະ ອຸດສາຫະກຳໃໝ່ທີ່ສາມາດຂາຍໃນຕະຫຼາດໄດ້ກໍ່ຈະເຮັດໃຫ້ຂະແໜງການນີ້ສາມາດພັດທະນາໄດ້ຫຼາຍຂຶ້ນອີກ. ການຜະລິດກະສິກຳເປັນສິນຄ້າ ແລະ ການເຮັດສັນຍາການຜະລິດຄືດັ່ງຫຼາຍປະເທດໄດ້ດຳເນີນມາ ແມ່ນມີຜົນກະທົບໃນທາງດີຢ່າງຕໍ່ເນື່ອງ ແລະ ທັງຊ່ວຍສ້າງວຽກເຮັດງານທຳໄດ້ນັ້ນກໍ່ສາມາດເຮັດໃຫ້ປະສົບຜົນສຳເລັດໃນລາວໄດ້ເຊັ່ນດຽວກັນ.

ຂະແໜງການສາທາລະນະສຸກ ແລະ ການສຶກສາມີທ່າແຮງຂະຫຍາຍໂຕ ຊຶ່ງຈະສາມາດພັດທະນາທັກສະໃນການເຮັດວຽກ ແລະ ຄວາມສາມາດໃນການຈ້າງງານ ທີ່ສາມາດປະກອບສ່ວນໂດຍກົງໃຫ້ແກ່ການພັດທະນາມະນຸດໄດ້. ການເພີ່ມການໃຊ້ຈ່າຍຂອງພາກລັດ ແມ່ນວິທີການໜຶ່ງທີ່ຈະຊ່ວຍຊຸກຍູ້ຂະຫຍາຍຂະແໜງການນີ້. ຄຽງຄູ່ກັບການເປີດໂອກາດ ໃຫ້ພາກເອກະຊົນເຂົ້າມາລົງທຶນໃນຂະແໜງການນີ້ແລ້ວ ຍັງສາມາດສ້າງການຮ່ວມມືກັນ ລະຫວ່າງພາກລັດ ແລະ ເອກະຊົນໄດ້. ຫຼາຍປະເທດ ໄດ້ເປີດໂອກາດໃຫ້ພາກເອກະຊົນເຂົ້າມາ ລົງທຶນໃນ ຂະແໜງສາທາລະນະສຸກ ແລະ ການສຶກສາ ຊຶ່ງໄດ້ສ້າງວຽກເຮັດງານທຳຈຳນວນຫຼວງຫຼາຍ. ແຕ່ບັນຫາທີ່ພົວພັນກັບການລົງທຶນດັ່ງກ່າວກໍ່ແມ່ນວ່າ ພາຍຫຼັງພາກເອກະຊົນເຂົ້າມາລົງທຶນແລ້ວ ຄ່າບໍລິການມັກຈະແພງຂຶ້ນ. ດັ່ງນັ້ນ, ສຳລັບປະເທດກຳລັງພັດທະນາ ການຫັນເອົາການບໍລິການເຫຼົ່ານີ້ໄປເປັນການບໍລິການຂອງເອກະຊົນ ອາດຈະເຮັດໃຫ້ປະຊາຊົນ



ການຂົນສົ່ງທາງນ້ຳແມ່ນຮູບການ ການຂົນສົ່ງໜຶ່ງທີ່ຖືກ ແລະ ມີປະສິດຕິພາບ

ສ່ວນໃຫຍ່ຂອງປະເທດບໍ່ສາມາດນຳໃຊ້ບໍລິການເຫຼົ່ານີ້ໄດ້ ຍ້ອນວ່າ ປະຊາຊົນມີລາຍຮັບບໍ່ພຽງພໍ ຖ້າຫາກວ່າປະຊາຊົນຈຳນວນຫຼາຍ ບໍ່ໄດ້ຮັບການປົກປ້ອງ ຈາກການປະກັນສັງຄົມ, ບໍ່ໄດ້ຮັບການ ອຸດໜູນ, ການຊ່ວຍເຫຼືອດ້ານທຶນຮອນ ແລະ ອື່ນໆ[51]. ນະໂຍບາຍ ຂອງລັດໃນການໃຫ້ການຊ່ວຍເຫຼືອແກ່ປະຊາຊົນທີ່ມີລາຍ ຮັບຕ່ຳ ສາມາດປະຕິບັດໄດ້ ໂດຍເພີ່ມສັດສ່ວນການໃຊ້ຈ່າຍຂອງ ພາກລັດໃນຂະແໜງການເຫຼົ່ານີ້ຈາກ ລວມຍອດຜະລິດຕະພັນ ພາຍໃນ (GDP) ໃຫ້ໄດ້ໃນລະດັບດຽວກັນກັບປະເທດອື່ນໃນ ຂົງເຂດອາຊຽນ ແລະ ອາຊີຕາເວັນອອກ ຊຶ່ງສາມາດນຳໃຊ້ລາຍຮັບ ຈາກພາສີ, ທຳນຽມທີ່ໄດ້ຈາກຂະແໜງຊັບພະຍາກອນມາຊ່ວຍ.

ຂະແໜງການທ່ອງທ່ຽວ ແລະ ຂົນສົ່ງ ເປັນຂະແໜງການທີ່ມີທ່າ ແຮງທີ່ດີໃນການສ້າງວຽກເຮັດງານທຳ. ອັດຕາການຈ້າງງານຕໍ່ຜົນ ຜະລິດໃນ ຂະແໜງການທ່ອງທ່ຽວ ແລະ ຮ້ານອາຫານ ແມ່ນ 1.32 ຊຶ່ງເປັນອັດຕາສູງສຸດຖ້າທຽບໃສ່ກິດຈະກຳອື່ນ ໃນຂະແໜງບໍລິການ ແລະ ຂະແໜງການອື່ນໆ. ຂະແໜງການທ່ອງທ່ຽວ ສາມາດພັດ ທະນາໄປໄດ້ອີກໂດຍບໍ່ຕ້ອງມີຄ່າສິ້ນເປືອງສູງ ເຊັ່ນ ການເປີດແຫຼ່ງ ທ່ອງທ່ຽວໃໝ່ ໃນແຂວງພາກເໜືອຄື: ແຂວງຜົ້ງສາລີ ແລະ ຫົວພັນ. ໃນປະຈຸບັນ, ການເດີນທາງໄປຫາແຂວງເຫຼົ່ານີ້ໃນລະດູໜາວ ແລະ ຝົນອາດມີຄວາມລຳບາກ ແຕ່ແຂວງເຫຼົ່ານີ້ມີສະຖານທີ່ທ່ອງທ່ຽວທີ່ ໜ້າສົນໃຈຫຼາຍແຫ່ງ. ພ້ອມກັນນັ້ນ, ຂະແໜງການທ່ອງທ່ຽວຍັງ ເປັນຂະແໜງການທີ່ມີການສ້າງມູນຄ່າເພີ່ມ ແລະ ກໍ່ຍັງສາມາດ ສ້າງວຽກເຮັດງານທຳໄດ້ຕື່ມອີກ[52]. ເຖິງຢ່າງໃດກໍ່ຕາມ, ສິ່ງສຳຄັນ ແມ່ນຕ້ອງຕິດຕາມກວດກາຄຸນນະພາບຂອງວຽກງານໃນຂະແໜງ ທ່ອງທ່ຽວ ເນື່ອງຈາກວ່າ ແຮງງານຈຳນວນຫຼາຍໃນຂະແໜງການນີ້ ເຮັດວຽກຮັບໃຊ້ບໍລິການທີ່ບໍ່ໃຊ້ທັກສະສີມືແຮງງານ ແລະ ໄດ້ປະ ຕິບັດມາໄດ້ເກືອບໜຶ່ງທົດສະວັດແລ້ວ.

## *ສະຫຼຸບຫຍໍ້:*

1. *ອົງປະກອບການຂະຫຍາຍໂຕຂອງຂະແໜງການມີຄວາມສຳ ຄັນ:ການຂະຫຍາຍໂຕຂອງຂະແໜງການທີ່ໃຊ້ແຮງງານຫຼາຍ ຈະເຮັດໃຫ້ມີການກະຈາຍຜົນປະໂຫຍດໄດ້ທົ່ວເຖິງກວ່າ. ໃນໄລຍະຜ່ານມາ ການລົງທຶນສ່ວນຫຼາຍແມ່ນຢູ່ໃນຂະແໜງ ຂຸດຄົ້ນ ແລະ ເຂັ້ມທຶນເຊັ່ນ: ບໍ່ແຮ່ ແລະ ພະລັງງານໄຟຟ້າ. ເພື່ອເຮັດໃຫ້ການລົງທຶນດັ່ງກ່າວເປັນການສ້າງໂອກາດໃຫ້ແກ່ ການຈ້າງງານ ແລະ ການພັດທະນາມະນຸດໄດ້ດີ, ຄວນປະ ຕິບັດບາງວິທີການທີ່ຊ່ວຍສົ່ງເສີມຂະແໜງການປິ່ນອ້ອມຂະ ແໜງການເຫຼົ່ານີ້.*

2. *ເຖິງແມ່ນວ່າການຈ້າງງານໃນຂະແໜງທີ່ບໍ່ແມ່ນກະສິກຳຍັງ ຕ່ຳກໍ່ຕາມ (ຊຶ່ງໃນນັ້ນ, ຂະແໜງບໍລິການມີການຈ້າງງານຫຼາຍ*

51 ການຫັນການບໍລິການດ້ານສຸຂະພາບ ແລະ ການຢາໃນຂະແໜງການສາທາລະນະສຸກຢູ່ປະເທດອິນເດຍເປັນຂອງເອກະຊົນ ແລະ ການຖອນຫຸ້ນສ່ວນຂອງລັດຖະບານອອກຈາກທຸລະກິດດັ່ງ ກ່າວໃນເວລາຕໍ່ມາເຮັດໃຫ້ເກີດມີໂຮງໝໍທີ່ຫຼູຫຼາລະດັບ 5 ດາວ ແລະ ຄະລີນິກລາຄາແພງຈຳນວນ ຫຼວງຫຼາຍ ຊຶ່ງໄດ້ດຶງດູດເອົາຄົນຮັ່ງມີທັງພາຍໃນ ແລະ ຕ່າງປະເທດເຂົ້າມານຳໃຊ້ບໍລິການທີ່ ເອີ້ນກັນວ່ານັກທ່ອງທ່ຽວເພື່ອຮັກສາສຸຂະພາບ. ບັນຫາເຫຼົ່ານີ້ໄດ້ດຶງດູດເອົາບຸກຄະລາກອນທີ່ມີຄຸນນະພາບ ແລະ ຊັບພະຍາກອນຕ່າງໆເຮັດໃຫ້ເຫຼືອການບໍລິການພຽງຈຳນວນໜ້ອຍດຽວໄວ້ ເພື່ອຄົນສ່ວນຫຼາຍຂອງປະເທດ. ລາຍລະອຽດຈາກວາລະສານ Time, ວັນທີ 14 ພຶດສະພາ 2008;ວາລະສານ The Economist, ວັນທີ 21-27 ເດືອນສິງຫາ 2008.

52 ນັກທ່ອງທ່ຽວຄົນໜຶ່ງ ສາມາດຈ່າຍເງິນໄດ້ໃນຫຼາຍກິດຈະກຳ ນອກເໜືອຈາກການໄປທ່ຽວຊົມສະຖານທີ່, ທີ່ພັກອາໄສ, ອາຫານແລະ ການເດີນທາງ. ການສ້າງມູນຄ່າເພີ່ມໃນຂະແໜງການ ທ່ອງທ່ຽວ ໝາຍເຖິງການໃຊ້ຈ່າຍເພີ່ມເຕີມຂອງນັກທ່ອງທ່ຽວໃນກິດຈະກຳເສີມເຫຼົ່ານີ້. ຕົວຢ່າງ ໃນປະເທດມໍລິຊຽດ, ນອກຈາກການທ່ຽວຊົມຊາຍຫາດທີ່ມີແສງແດດດີ ເຊັ່ນ ກິລາທາງນ້ຳ, ການຍ່າງທ່ຽວກ້ອງນ້ຳ ແລະ ການທ່ອງທ່ຽວໃນຍາມລາຕີທີ່ມີປະໂຫຍດ ຊຶ່ງທັງໝົດເຫຼົ່ານີ້ ລ້ວນແຕ່ເຮັດໃຫ້ນັກທ່ອງທ່ຽວສາມາດເຮັດກິດຈະກຳໄດ້ອີກ. ການທ່ອງທ່ຽວທີ່ສ້າງມູນຄ່າເພີ່ມ ແມ່ນເພື່ອ ສ້າງໂອກາດໃຫ້ນັກທ່ອງທ່ຽວໄດ້ມີການໃຊ້ຈ່າຍຫຼາຍທີ່ສຸດ ຊຶ່ງເປັນການສ້າງມູນຄ່າເພີ່ມ ແລະ ສ້າງວຽກເຮັດງານທຳໃນທ້ອງຖິ່ນ.

*ກວ່າຂະແໜງອຸດສາຫະກຳ), ແຕ່ການມີນະໂຍບາຍ ແລະ ສະພາບແວດລ້ອມທີ່ເອື້ອອຳນວຍຕໍ່ການເຮັດທຸລະກິດ ກໍ່ສາມາດຂະຫຍາຍການຈ້າງງານໃຫ້ເພີ່ມຂຶ້ນອີກໄດ້. ກິດຈະກຳຕ່າງໆ ເຊັ່ນ: ການຕຳແຜ່ນແພ, ຕັດຫຍິບ, ກິດຈະກຳປຸງແຕ່ງໄມ້, ປຸງແຕ່ງອາຫານ, ການຂົນສົ່ງ, ທ່ອງທ່ຽວ, ການສຶກສາ ແລະ ສາທາລະນະສຸກມີທ່າແຮງໃນການສ້າງວຽກເຮັດງານທຳໃຫ້ຫຼາຍຂຶ້ນ. ເຖິງຢ່າງໃດກໍ່ຕາມ,ສິ່ງເຫຼົ່ານີ້ຈະສາມາດເກີດຂຶ້ນໄດ້ດີກໍ່ຕໍ່ເມື່ອມີນະໂຍບາຍສົ່ງເສີມທີ່ຄົບຖ້ວນ ແລະ ຮັດກຸມ (ສະເພາະແຕ່ລະກິດຈະກຳ) ແລະ ມີການຮ່ວມມືກັນລະຫວ່າງພາກລັດ ແລະ ເອກະຊົນຢ່າງເໝາະສົມ.*

3. *ເຖິງແມ່ນວ່າແຕ່ລະຂະແໜງການ ມີຄວາມແຕກຕ່າງກັນເລັກນ້ອຍກໍ່ຕາມ ແຕ່ຂໍ້ສະເໜີແນະລວມມີດັ່ງຕໍ່ໄປນີ້:*
   - *ກ. ປັບປຸງຄຸນນະພາບຄວາມສາມາດຂອງມະນຸດ;*
   - *ຂ. ປັບປຸງຄຸນນະພາບຂອງພື້ນຖານໂຄງລ່າງ;*
   - *ຄ. ເຮັດໃຫ້ການຈັດຕັ້ງປະຕິບັດກິດໝາຍມີຄວາມວ່ອງໄວ; ແລະ*
   - *ງ. ຕ້ອງມີມາດຕະການເພື່ອຫຼຸດຄ່າໃຊ້ຈ່າຍ ຕົວຢ່າງ ການຂົນສົ່ງ, ພະລັງງານ ແລະ ບໍລິການອື່ນໆ.*

## ວຽກງານກະສິກຳແບບຄອບຄົວສາມາດຫຼຸດຜ່ອນຄວາມທຸກຍາກ ແລະ ເພີ່ມລະດັບການພັດທະນາມະນຸດໄດ້

ການເຮັດວຽກໃນຂະແໜງກະສິກຳ (ການຜະລິດກະສິກຳແບບຄົວເຮືອນ) ບໍ່ໝາຍວ່າມີແຕ່ຄົນທຸກຍາກເທົ່ານັ້ນທີ່ເປັນຜູ້ເຮັດ. ໃນດ້ານໜຶ່ງອີກ, ຂະແໜງກະສິກຳທີ່ມີການຂະຫຍາຍໂຕ ແລະ ມີປະສິດທິຜົນສູງສາມາດສ້າງລາຍຮັບໄດ້ຢ່າງຫຼວງຫຼາຍ. ໃນທົດສະວັດຜ່ານມາ ການຂະຫຍາຍໂຕຂອງຂະແໜງການນີ້ຢູ່ປະເທດເຮົາແມ່ນເກີດມາຈາກການຂະຫຍາຍເນື້ອທີ່ການຜະລິດເພີ່ມຂຶ້ນ ຄືປະມານ 55% ລະຫວ່າງ ປີ 1995 ຫາ 2005 (ຫຼື ຂະຫຍາຍ 4.5% ຕໍ່ປີ ຊຶ່ງເທົ່າກັບອັດຕາການຂະຫຍາຍໂຕຂອງການຜະລິດໃນຂະແໜງການນີ້). ນອກຈາກນີ້, ວຽກງານກະສິກຳກໍ່ຍັງຂາດຄວາມຫຼາກຫຼາຍ. ເຖິງຢ່າງໃດກໍ່ຕາມ, ທ່າອ່ຽງດັ່ງກ່າວບໍ່ສາມາດຄົງໂຕຕໍ່ໄປໄດ້ອີກດົນ ເພາະວ່າ ເນື້ອທີ່ດິນທີ່ສາມາດຈັບຈອງ ເພື່ອທຳການຜະລິດກະສິກຳ ນັບມື້ນັບມີໜ້ອຍລົງ. ດັ່ງນັ້ນ, ຈຶ່ງມີຄວາມຈຳເປັນໃນການເພີ່ມປະລິມານຜົນຜະລິດໃນດິນທີ່ກຳລັງທຳການຜະລິດ

**ກ່ອງ 3.3: ການຂະຫຍາຍໂຕຂອງຂະແໜງກະສິກຳ, ຄວາມທຸກຍາກ ແລະ ການພັດທະນາມະນຸດ**

ໂຄງການ ໄດ້ພະຍາຍາມເກັບຂໍ້ມູນລວມຂອງຫຼາຍຂະແໜງການ (ໂດຍໄດ້ສັງເກດການຢູ່ແຕ່ລະແຂວງເປັນເວ ລາ 2 ປີ, ແລະ ໄດ້ສັງລວມສາຍພົວພັນຂໍ້ມູນຂອງແຂວງດັ່ງກ່າວໃນໄລຍະ ປີ 1995-1997 ແລະ 2003- 2005 ແລ້ວນຳມາລວມເຂົ້າກັນ) ເພື່ອພິສູດຫາສາຍພົວພັນທາງສະຖິຕິ. ຕົວປ່ຽນທີ່ບໍ່ເອກະລາດແມ່ນສັດສ່ວນຂອງ ຄົນທີ່ມີລະດັບຊີວິດການເປັນຢູ່ຕ່ຳກວ່າເສັ້ນຄວາມທຸກຍາກ ແລະ ດັດຊະນີການພັດທະນາມະນຸດ ໃນ 2 ສົມຜົນ ແລະ ຕົວປ່ຽນອະທິບາຍແມ່ນອັດຕາສ່ວນປະລິມານຜົນຜະລິດເຂົ້າ ແລະ ສັດສ່ວນຂອງອາຊີບນອກຂະແໜງກະສິກຳທຽບໃສ່ອາຊີບທັງໝົດ. ປະລິມານຜົນຜະລິດເຂົ້າ ແມ່ນຕົວແທນໃຫ້ແກ່ການມີລາຍຮັບເພີ່ມຂຶ້ນຂອງຊາວກະສິກອນ ຍ້ອນວ່າ ເຂົ້າ ແມ່ນພືດສຳຄັນທີ່ສຸດຂອງປະເທດ. ທັງສອງສົມຜົນ ແມ່ນໄດ້ຮັບຜົນການທົດສອບທາງສະຖິຕິທີ່ດີ ໂດຍຊີ້ໃຫ້ເຫັນວ່າ ມີຄວາມຈຳເປັນທີ່ຈະຕ້ອງເພີ່ມປະລິມານຜົນຜະລິດໄປຄຽງຄູ່ກັບການເພີ່ມການສ້າງວຽກເຮັດງານທຳນອກຂະແໜງກະສິກຳ ເພື່ອເພີ່ມລະດັບການພັດທະນາມະນຸດ ແລະ ຫຼຸດຜ່ອນຄວາມທຸກຍາກລົງ.

**ສົມຜົນທີ 1:** ຕົວປ່ຽນຂຶ້ນກັບ: ໂລກາລິດຂອງອັດຕາສ່ວນຄວາມທຸກຍາກ

| ຕົວປ່ຽນເອກະລາດ | ຕົວຄູນ | ຄ່າ 't' | ຄວາມໜ້າເຊື່ອຖື |
|---|---|---|---|
| ຄ່າຄົງທີ່: | 5.52 | 19.19 | ໜ້າເຊື່ອຖື (1%) |
| ໂລກາລິດຂອງປະສິດທິພາບໃນການຜະລິດຂອງດິນ (ຜະລິດເຂົ້າ) | 0.85 | 2.68 | ໜ້າເຊື່ອຖື (5%) |
| ໂລກາລິດອັດຕາສ່ວນຂອງອາຊີບນອກກະສິກຳ | 0.46 | 4.32 | ໜ້າເຊື່ອຖື (1%) |
| ແບບຈຳລອງ (ຄ່າເສັ້ນຕັດ-intercept ຂອງຂໍ້ມູນ) | 0.27 | 2.12 | ໜ້າເຊື່ອຖື (5%) |

**$R^2$ = 0.62; F=17.41; n=36**

**ສົມຜົນທີ 2:** ຕົວປ່ຽນຂຶ້ນກັບ: ໂລກາລິດຂອງດັດຊະນີການພັດທະນາມະນຸດ (HDI)

| ຕົວປ່ຽນເອກະລາດ | ຕົວຄູນ | ຄ່າ 't' | ຄວາມໜ້າເຊື່ອຖື |
|---|---|---|---|
| ຄ່າຄົງທີ່: | -2.75 | 20.72 | ໜ້າເຊື່ອຖື (1%) |
| ໂລກາລິດຂອງປະສິດທິພາບໃນການຜະລິດຂອງດິນ (ຜະລິດເຂົ້າ) | 0.65 | 4.30 | ໜ້າເຊື່ອຖື (1%) |
| ໂລກາລິດອັດຕາສ່ວນຂອງອາຊີບນອກກະສິກຳ | 0.34 | 6.69 | ໜ້າເຊື່ອຖື (1%) |
| ແບບຈຳລອງ (ຄ່າເສັ້ນຕັດ-intercept ຂອງຂໍ້ມູນ) | 0.10 | 1.65 | ໜ້າເຊື່ອຖື (10%) |

**$R^2$ = 0.88; F=76.83; n=36**

ກະສິກຳຢູ່. ການດຳເນີນການຜະລິດກະສິກຳແບບເລັ່ງລັດ ຫຼື ການເຮັດກະເສດສຸມ ສາມາດນຳໃຊ້ແຮງງານໃຫ້ເກີດປະສິດທິພາບກວ່າ ແລະ ເຮັດໃຫ້ແຮງງານກະຈາຍໄປໃນຂະແໜງການທີ່ບໍ່ແມ່ນກະສິກຳ ດ້ວຍການຂະຫຍາຍຂະແໜງ ການປິ່ນອ້ອມ. ຄວາມຈິງແລ້ວ, ໂອກາດໃນການຫຼຸດຜ່ອນຄວາມທຸກຍາກ ແລະ ການເພີ່ມດັດຊະນີພາຍດ້ານການພັດທະນາມະນຸດຈະມີສູງກວ່າ ຖ້າຜະລິດຕະພາບໃນຂະແໜງກະສິກຳມີການຂະຫຍາຍ ໂຕດີໃນລະດັບໃກ້ຄຽງກັບຂະແໜງການອື່ນທີ່ບໍ່ແມ່ນກະສິກຳ (ເບິ່ງກ່ອງ 3.3).

ຄອບຄົວທີ່ເຮັດວຽກ ແລະ ອາໄສວຽກງານກະສິກຳ ຈະຕ້ອງມີການດຳລົງຊີວິດທີ່ດີກວ່າ. ຢາກເຮັດໄດ້ຄືແນວນີ້ ກໍ່ຕໍ່ເມື່ອວ່າ ການຂະຫຍາຍໂຕໃນຂະແໜງກະສິກຳ ແລະ ໃນວຽກອື່ນໆທີ່ກ່ຽວຂ້ອງ ຈະຕ້ອງຮັບປະກັນເຮັດແນວໃດຈະສາມາດຮັກສາການແບ່ງປັນຜົນປະໂຫຍດໃຫ້ແກ່ຊາວກະສິກອນໄດ້. ດັ່ງນັ້ນ, ຖ້າເປັນໄປໄດ້ໂຄງການປູກໄມ້ຂະໜາດໃຫຍ່ ຄວນໄດ້ຮັບການສົ່ງເສີມສະເພາະແຕ່ໃນເຂດທີ່ປະຊາຊົນຮູ້ສຶກວ່າ ໄດ້ຮັບຜົນກະທົບທາງລົບໜ້ອຍທີ່ສຸດ. ບາງວິທີການເພື່ອເພີ່ມລາຍຮັບຈາກການຜະລິດກະສິກຳແບບຄອບຄົວມີດັ່ງນີ້:

**ດ້ານການຈັດຕັ້ງ**

1. ຄວນຮັບປະກັນສິດໃນການຄອບຄອງທີ່ດິນ ເພື່ອເຮັດໃຫ້ຕະຫຼາດທີ່ດິນ ໄດ້ຮັບການພັດທະນາ ແລະ ສາມາດດຶງດູດເອົາການລົງທຶນເຂົ້າໃນຕະຫຼາດດັ່ງກ່າວໄດ້ດີ.
2. ຄວບຄຸມບໍ່ໃຫ້ມີການແບ່ງດິນເປັນຫຼາຍຕອນເກີນໄປ ເພື່ອຮັກສາຄວາມຄຸ້ມຄ່າທາງດ້ານເສດຖະກິດ. ນະໂຍບາຍນີ້ ອາດມີລັກສະນະສະເພາະຂອງແຕ່ລະປະເທດ, ແຕ່ໃນນັ້ນຍັງມີຫຼາຍປະເທດໄດ້ນຳເອົານະໂຍບາຍນີ້ ໄປຈັດຕັ້ງປະຕິບັດໃນປະເທດຂອງຕົນ ເຊັ່ນ: ປະເທດຊິລີ, ອີຢິບ, ອິນເດຍ, ອີຣັກ, ຍີ່ປຸ່ນ, ເລບານອນ, ແມັກຊິໂກ, ເກົາຫຼີໃຕ້ ແລະ ຊີເລຍ ເປັນຕົ້ນ.

**ດ້ານເຕັກໂນໂລຊີ**

3. ການດຳເນີນວິທີການຜະລິດ "ກະສິກຳເປັນລະບົບ" ເພື່ອໃຫ້ສາມາດນຳໃຊ້ທີ່ດິນ ແລະ ຊັບພະຍາກອນອື່ນໆ ແລະ ສາມາດສ້າງລາຍຮັບໄດ້ຕະຫຼອດປີ ກໍ່ແມ່ນສິ່ງທີ່ມີປະໂຫຍດຫຼາຍ.
4. ການນຳໃຊ້ເຕັກໂນໂລຊີເຄມີ-ຊີວະພາບທີ່ບໍ່ກະທົບຕໍ່ສິ່ງແວດລ້ອມ ແລະ ການປູກພືດປະສົມປະສານທີ່ແທດເໝາະສາມາດເພີ່ມຜົນຜະລິດໄດ້.
5. ການໃຊ້ແນວພັນປັບປຸງສາມາດຊ່ວຍເພີ່ມຜົນຜະລິດໄດ້.
6. ຄວນຂະຫຍາຍວຽກງານສົ່ງເສີມກະສິກຳ.

**ດ້ານການຕະຫຼາດ**

7. ຊ່ອງທາງການຕະຫຼາດ ສາມາດຊ່ວຍໃຫ້ຊາວກະສິກອນໃນເຂດຫ່າງໄກ ໄດ້ຂາຍສິນຄ້າໃນລາຄາທີ່ເໝາະສົມດີ ແລະ ມີລາຍຮັບສູງຂຶ້ນ ຊຶ່ງການເຮັດສັນຍາການຜະລິດກໍ່ເປັນວິທີການໜຶ່ງທີ່ສາມາດຮັບປະກັນໄດ້. ວິທີການອື່ນ ແມ່ນການຈັດຕັ້ງສະມາຄົມຊາວກະສິກອນ ເພື່ອກຳນົດລາຄາຂາຍ (ຄືດັ່ງສະມາຄົມຜູ້ປູກກາເຟ). ໃນບາງປະເທດ, ຊາວກະສິກອນມີສາງເກັບສິນຄ້າຂະໜາດໃຫຍ່ (ດ້ວຍການສະໜັບສະໜູນເງິນກູ້) ເພື່ອບໍ່ໃຫ້ຊາວກະສິກອນ ຕ້ອງຂາຍສິນຄ້າໃນລະດູເກັບກ່ຽວເວລາທີ່ສິນຄ້າມີລາຄາຖືກ ແລະ ໃນບາງປະເທດພາກລັດກໍ່ໄດ້ໃຫ້ການຊ່ວຍເຫຼືອ ເພື່ອຮັກສາສະຖຽນລະພາບຂອງລາຄາ. ລາວເຮົາ ສາມາດເລືອກເອົານະໂຍບາຍທີ່ເໝາະສົມທີ່ສຸດກັບຄວາມຕ້ອງການຂອງປະເທດ. ພ້ອມກັນນັ້ນ, ບັນດາເຄື່ອງມືສື່ສານເອເລັກໂຕຣນິກ (ໂທລະພາບ, ໂທລະສັບມືຖື) ກໍ່ເປັນເຄື່ອງມືທີ່ຊ່ວຍໃຫ້ຊາວນາ ສາມາດຮູ້ລາຄາຕະຫຼາດປະຈຸບັນໄດ້.

**ດ້ານພື້ນຖານໂຄງລ່າງ**

8. ການຂະຫຍາຍສິນເຊື່ອ ແລະ ການອອມຊັບ ເພື່ອຊຸກຍູ້ກິດຈະກຳການເງິນຈຸລະພາກທີ່ມີຢູ່ແລ້ວກໍ່ສາມາດຊ່ວຍສ້າງເງື່ອນໄຂເພີ່ມລາຍຮັບໄດ້.
9. ປະລິມານການຜະລິດ ຈະເພີ່ມຂຶ້ນສູງຢ່າງໄວວາ ຖ້າຫາກມີການຄຸ້ມຄອງ ລະບົບຊົນລະປະທານ ໃຫ້ດີ. ດັ່ງນັ້ນ, ຈຳເປັນຈະຕ້ອງມີການລົງທຶນໃນການສ້າງຊົນລະປະທານທີ່ມີຄວາມຍືນຍົງ ແລະ ມີສ່ວນຮ່ວມຈາກຫຼາຍຝ່າຍ.

## ສະຫຼຸບຫຍໍ້:

1. *ເນື່ອງຈາກວ່າ ຄວາມທຸກຍາກຫຼາຍຂອງອາຊີບການງານສ່ວນໃຫຍ່ຕິດພັນກັບການຂະຫຍາຍ ໂຕຂອງຂະແໜງກະສິກຳ, ດັ່ງນັ້ນການເພີ່ມປະສິດທິພາບຂອງການຜະລິດກະສິກຳຈຶ່ງເປັນເລື່ອງທີ່ສຳຄັນ. ການພັດທະນາຂະແໜງກະສິກຳຄວນເນັ້ນໃສ່ເຂດຫ່າງໄກຈາກຕົວເມືອງ ຊຶ່ງສ່ວນໃຫຍ່ເປັນເຂດທີ່ບໍ່ແມ່ນ ເຜົ່າລາວ-ໄຕ ອາໄສຢູ່ຈະເປັນການສົ່ງເສີມການພັດທະນາພາກຕ່າງໆໃຫ້ເທົ່າທຽມກັນ.*

2. *ຂະແໜງກະສິກຳ ກໍ່ມີຄວາມອາດສາມາດໃນການສະໜອງການດຳລົງຊີວິດທີ່ດີ ຖ້າຫາກວ່າຜະລິດຕະພາບໃນການຜະລິດຫາກມີການຂະຫຍາຍ ໂຕຍ້ອນມາດຕະການທາງເຕັກນິກ ແລະ ການຈັດຕັ້ງຕ່າງໆ.*

3. *ການບໍລິການສົ່ງເສີມ, ການໃຫ້ສິນເຊື່ອ ແລະ ການຕະຫຼາດມີບົດບາດສຳຄັນໃນການຫັນເອົາຂະແໜງກະສິກຳໄປສູ່ຄວາມທັນສະໄໝ.*

## ຜ່ານຜ່າອຸປະສັກ: ເບື້ອງໃຫ້ການສະໜອງ

ການຂະຫຍາຍ ໂຕຂອງເສດຖະກິດທີ່ເຂັ້ມງານ ຕິດພັນກັບສະພາບແວດລ້ອມເສດຖະກິດມະຫາພາກ ແລະ ຄວາມສາມາດໃນການຈ້າງງານ ລ້ວນແຕ່ມີຄວາມສຳຄັນຕໍ່ການສ້າງວຽກເຮັດງານທຳ. ພາກນີ້ຈະສຶກສາລົງ ເລິກເຖິງລະດັບຄວາມພ້ອມຂອງແຮງງານ (ປັດໄຈຄວາມສາມາດໃນການຈ້າງງານ). ຫຼັງຈາກນັ້ນ, ກໍ່ຈະສຶກສາວິໄຈເຖິງຄວາມສາມາດໃນການຂະຫຍາຍ ໂຕຂອງວິສະຫະກິດໂດຍປະເມີນຈາກ ຂະໜາດຂອງທຸລະກິດ. ສຸດທ້າຍຈະສຶກສາກ່ຽວກັບ ໂອກາດໃນການດຳເນີນທຸລະກິດ ເພື່ອຮອງຮັບກັບສິ່ງທ້າທາຍໃນການຫັນເປັນອຸດສາຫະກຳ ແລະ ການສ້າງວຽກເຮັດງານທຳໃນຂະແໜງທີ່ບໍ່ແມ່ນກະສິກຳ.

### ລະດັບການສຶກສາຂອງແຮງງານ

ຈຳນວນ 1/4 ຂອງແຮງງານຍັງກືກໜັງສື ແລະ ແຮງງານອີກຈຳນວນຫຼວງຫຼາຍຍັງມີລະດັບການສຶກສາຕ່ຳກວ່າຈຳນວນປີເຕັມຂອງ ການສຶກສາຊັ້ນປະຖົມສົມບູນ (ຊຶ່ງແມ່ນ 5 ປີ, ຮູບສະແດງ 3.7). ດັ່ງນັ້ນ, ສິ່ງຈຳເປັນທີ່ຈະຕ້ອງປະຕິບັດກໍ່ຄືກຽມຄວາມພ້ອມໃຫ້ແກ່ແຮງງານ ເພື່ອໃຫ້ສາມາດຜ່ານຜ່າບັນດາສິ່ງທ້າທາຍຈາກການຫັນເປັນອຸດສາຫະກຳ. ໂດຍສະເພາະແມ່ນ ແມ່ຍິງ ຕ້ອງໄດ້ເອົາໃຈໃສ່ເປັນພິເສດ ເນື່ອງຈາກວ່າເຂົາເຈົ້າມີອັດຕາການກືກໜັງສືສູງກວ່າ ແລະ ລະດັບທັກສະສີມືຕ່ຳກວ່າ (ກ່ອງ 3.4).

**ກ່ອງ 3.4: ການສຶກສາ ແລະ ການຈ້າງແຮງງານແມ່ຍິງ**

ລະດັບ ແລະ ປະເພດການສຶກສາ ລະຫວ່າງ ແຮງງານຜູ້ຊາຍ ແລະ ແມ່ຍິງຍັງມີຄວາມແຕກໂຕນກັນສູງ. ໃນ ຫົວໜ່ວຍທຸລະກິດຂອງຂະແໜງເສດຖະກິດທີ່ບໍ່ແມ່ນກະສິກຳ (NFEE) ແຮງງານຜູ້ຊາຍ ໄດ້ຮັບການສຶກສາໃນລະດັບມະຫາວິທະຍາໄລ, ວິທະຍາໄລ ແລະ ຂະແໜງການສຶກສາວິຊາຊີບສູງກວ່າແຮງງານແມ່ຍິງ (ເບິ່ງ ຮູບສະແດງຂ້າງລຸ່ມ). ແຮງງານແມ່ຍິງ ແມ່ນນຳໜ້າທາງດ້ານການສຶກສາທົ່ວໄປ ແລະ ການສຶກສາທີ່ບໍ່ລະບຸລະບົບ (ໝາຍເຖິງການສຶກສານອກໂຮງຮຽນ). ຍ້ອນແນວນັ້ນ, ແຮງງານແມ່ຍິງ ໄດ້ເຮັດວຽກມີຄຸນນະພາບ ແລະ ມີບົດບາດຕ່ຳກວ່າແຮງງານຜູ້ຊາຍ. ດັດຊະນີດັນເຄນ (Duncan) ວ່າດ້ວຍ ຄວາມແຕກໂຕນກັນຄິດໄລ່ໂດຍການຈັດແຮງງານຕາມລະດັບ 2 ຕົວເລກ ແມ່ນມີຄ່າເທົ່າກັບ 0.44 ຊຶ່ງ ສະແດງວ່າມີຄວາມແຕກໂຕນກັນໃນການແບ່ງວຽກງານ ລະຫວ່າງ ແມ່ຍິງ ແລະ ຜູ້ຊາຍໃນຫົວໜ່ວຍທຸລະກິດຂອງຂະແໜງເສດຖະກິດທີ່ບໍ່ແມ່ນກະສິກຳ. [ດັດຊະນີດັນເຄນ ຂອງຄວາມແຕກໂຕນກັນແມ່ນ: D = 0.5[S(|Mi/SM – Fi/SF|)], ໃນນັ້ນ, Mi ແມ່ນຈຳນວນຂອງແຮງງານຜູ້ຊາຍເຮັດວຽກໃນອຸດສາຫະກຳທີ $i^{th}$, Fi ແມ່ນຈຳນວນແຮງງານແມ່ຍິງເຮັດວຽກໃນອຸດສາຫະກຳທີ $i^{th}$, Mi ແລະ Fi ແມ່ນຈຳນວນແຮງງານຜູ້ຊາຍ ແລະ ແມ່ຍິງທັງໝົດ. ຄ່າຄວາມແຕກໂຕນກັນສູງສຸດແມ່ນເທົ່າກັບ D=1 ແລະ ຕ່ຳສຸດແມ່ນເທົ່າກັບ D=0].

**ການແຈກຢາຍອັດຕາສ່ວນແຮງງານຜູ້ຊາຍ ແລະ ແມ່ຍິງຕາມປະເພດການສຶກສາທີ່ຮຽນຈົບໃນຂະແໜງ ທີ່ບໍ່ ແມ່ນກະສິກຳ, ປີ 2006**




*ແຫຼ່ງຂໍ້ມູນ: ການສຳຫຼວດເສດຖະກິດທົ່ວປະເທດ ປີ 2006 (GOL (2007c).*

ຂໍ້ມູນຈາກການສຳຫຼວດເສດຖະກິດປີ 2006 ສະແດງໃຫ້ເຫັນວ່າ 12% ຂອງແຮງງານໃນຫົວໜ່ວຍທຸລະກິດໃນຂະແໜງເສດຖະກິດທີ່ບໍ່ແມ່ນກະສິກຳບໍ່ໄດ້ຜ່ານການສຶກສາໃນລະບົບໂຮງຮຽນ (ຮູບສະແດງ 3.9). ດັ່ງນັ້ນ, ອາດເວົ້າໄດ້ວ່າ ຍັງມີແຮງງານທີ່ບໍ່ໄດ້ຜ່ານການສຶກສາໃນລະບົບໂຮງຮຽນ ເຊັ່ນດຽວກັນຢູ່ໃນຂະແໜງການນອກກະສິກຳ. ການທີ່ຈະຄາດຄະເນໄດ້ວ່າ ຫົວໜ່ວຍທຸລະກິດໃນຂະແໜງເສດຖະກິດທີ່ບໍ່ແມ່ນກະສິກຳ ຈະມີຄວາມສາມາດຮອງຮັບເອົາແຮງງານໃນຈຳນວນຫຼາຍກວ່ານີ້ນັ້ນ ເປັນສິ່ງທີ່ບໍ່ໜ້າຈະເປັນໄປໄດ້. ແຮງງານສ່ວນໃຫຍ່ໃນທຸກຂະແໜງການນອກເໜືອຈາກຂະແໜງບໍ່ແຮ່ (ບ່ອນທີ່ມີຈຳນວນການຈ້າງງານຂ້ອນຂ້າງໜ້ອຍ) ແມ່ນມີໃບປະກາດສະນີຍະບັດດ້ານການສຶກສາທົ່ວໄປ, ບໍ່ແມ່ນລະດັບການສຶກສາຊັ້ນສູງ ຫຼື ເຕັກນິກ. ລະດັບການສຶກສາ ແລະ ຄວາມຊຳນານງານຕ່ຳ ເປັນປັດໄຈຈຳກັດການຂະຫຍາຍໂຕຂອງຫຼາຍຂະແໜງການນອກກະສິກຳ ແລະ ວິສາຫະກິດ.

ຖ້າເບິ່ງລະດັບການສຶກສາຂອງແຮງງານຕາມຂະແໜງການຍ່ອຍ ຈະເຫັນໄດ້ວ່າ ແຮງງານໃນຂະແໜງການອື່ນ ນອກເໜືອໄປຈາກ 'ໄຟຟ້າ, ນ້ຳປະປາ ແລະ ອາຍແກັດສ' ແລະ 'ຂະແໜງບໍລິການອື່ນໆ' (ຊຶ່ງລວມມີວຽກງານທີ່ປຶກສາ, ຂະແໜງສາທາລະນະສຸກ ແລະ ສຶກສາພາກເອກະຊົນທີ່ສ້າງຜົນກຳໄລ) ມີການສຶກສາໃນລະດັບເຕັກນິກວິຊາຊີບ ຫຼື ວິທະຍາໄລ ແລະ ມະຫາວິທະຍາໄລຕ່ຳກວ່າ 20%. ສ່ວນແຮງງານໃນຂະແໜງການຜະລິດກະສິກຳເປັນສິນຄ້າ, ປຸງແຕ່ງອາຫານ, ແຜ່ນແພ, ຕັດຫຍິບ ແລະ ປຸງແຕ່ງໄມ້, ອັດຕາສ່ວນແຮງງານດັ່ງກ່າວທີ່ມີການສຶກສາໃນລະດັບທີ່ກ່າວມາຂ້າງເທິງນັ້ນແມ່ນຕ່ຳກວ່າ 10%. ຂໍ້ມູນດັ່ງກ່າວນີ້ ຊີ້ໃຫ້ເຫັນເຖິງການຂາດແຮງງານທີ່ມີຄຸນນະພາບໂດຍສະເພາະໃນຂະແໜງການປຸງແຕ່ງ. ບັນຫານີ້ອາດເປັນເຫດຜົນໜຶ່ງທີ່ມີພຽງແຕ່ອຸດສາຫະກຳເຂັ້ມທຶນ ແລະ ບາງກິດຈະກຳປິ່ນອ້ອມເທົ່ານັ້ນມີການຂະຫຍາຍໂຕໃນລາວໄລຍະຜ່ານມາ.

ສາມາດໃຫ້ເຫດຜົນໄດ້ວ່າລັກສະນະ ແລະ ລະດັບການສຶກສາດັ່ງກ່າວນັ້ນບໍ່ໄດ້ແຕກຕ່າງຫຼາຍຈາກຫຼາຍໆປະເທດທີ່ຢູ່ໃນໄລຍະຕົ້ນຂອງການພັດທະນາ. ຖ້າດັ່ງນັ້ນ, ເປັນຫຍັງຈຶ່ງຕ້ອງມີການຈົ່ມວ່າແຮງງານລາວບໍ່ຖືກຈ້າງງານຫຼາຍຍ້ອນທັກສະສີມື ແລະ ປະສິດທິພາບຕ່ຳ? ບາງຄຳຕອບໄດ້ຈາກທັດສະນະຂອງຜູ້ຈ້າງງານເພື່ອເພີ່ມເຕີມໃຫ້ແກ່ຂໍ້ສັງເກດການຈາກພາກສະໜາມມີຄື[53]:

53 ແຫຼ່ງຂໍ້ມູນ: ສຳມະນາຈັດໂດຍກະຊວງສຶກສາ ລະຫວ່າງນາຍຈ້າງ ແລະ ຜູ້ໃຫ້ການສຶກສາ ສຳລັບໂຄງການ; ລາຍລະອຽດຈາກ MOE (2008).

**ຮູບສະແດງ 3.7: ອັດຕາສ່ວນແຮງງານແຈກຢາຍຕາມລະດັບການສຶກສາ ສໍາລັບແຕ່ລະເພດ, ປີ 2005**




***ແຫຼ່ງຂໍ້ມູນ:*** *ຮວບຮວມມາຈາກການສໍາຫຼວດພົນລະເມືອງປີ 2005 (GOL 2006a).*

1. ແຮງງານບໍ່ມີລະດັບການສຶກສາມີຄຸນນະພາບ ຫຼື ມີຄວາມຮູ້ ແລະ ສີມືແຮງງານບໍ່ພຽງພໍ ເພື່ອທີ່ຈະເຮັດວຽກງານອຸດສາຫະກໍາໄດ້. ການສິດສອນ ແມ່ນມີລັກສະນະທ່ອງຂຶ້ນໃຈ, ບໍ່ໃຫ້ຄວາມຮູ້ທັກສະໃນການຄົ້ນຄິດ ແລະ ວິໄຈ, ບໍ່ເຮັດໃຫ້ຢາກອ່ານ ຫຼື ສ້າງຄວາມຢາກຮູ້ຮໍ່າຮຽນດ້ວຍຕົນເອງ.

2. ສິ່ງທີ່ຂະແໜງການທີ່ບໍ່ແມ່ນກະສິກໍາຕ້ອງການ ແລະ ຖານເສດຖະກິດທີ່ເລັ່ງໃສ່ຄວາມຮູ້ມີຄວາມແຕກຕ່າງໄປຈາກການເບິ່ງໂລກ ແລະ ທັດສະນະຂອງແຮງງານ. ແຕ່ຖ້າເບິ່ງໃນລັກສະນະໜຶ່ງອີກ ກໍ່ແມ່ນຮູບການແຂ່ງຂັນ ຫຼື ເລືອກເຟັ້ນຄັກແນ່, ແຕ່ກໍ່ແມ່ນສິ່ງທີ່ໜ້າເປັນຫ່ວງ.

3. ວຽກເຮັດງານທໍາ ໃນຂະແໜງການທີ່ບໍ່ແມ່ນກະສິກໍາ ສ່ວນໃຫຍ່ມີຄວາມຕ້ອງການຄວາມຮູ້ດ້ານພາສາລາວຄ່ອງແຄ້ວ ແລະ ໃນບາງກໍລະນີ ກໍ່ຕ້ອງການຄວາມຄ່ອງແຄ້ວລ່ຽນໄຫຼດ້ານພາສາຕ່າງປະເທດເຊັ່ນກັນ. ແຕ່ວ່າ, ປະຊາຊົນບັນດາເຜົ່າຈໍານວນໜຶ່ງທີ່ຈົບຈາກໂຮງຮຽນມາພັດຍັງບໍ່ມີຄວາມຄ່ອງແຄ້ວລ່ຽນໄຫຼໃນພາສາລາວ ແລະ ພາສາຕ່າງປະເທດ.

4. ການມີລະດັບການສຶກສາລະບົບທົ່ວໄປຫຼາຍເກີນໄປ ແລະ ມີລະດັບການສຶກສາເຕັກນິກວິຊາຊີບໜ້ອຍ ເກີນໄປກໍ່ເປັນບັນຫາເຮັດໃຫ້ຄວາມສາມາດໃນການຈ້າງງານໃນຫຼາຍກິດຈະການຂະຫຍາຍໂຕຊ້າ.

5. ລະບົບສະໜອງການສຶກສາດ້ານເຕັກນິກ ແລະ ວິຊາຊີບໃນປະຈຸບັນຍັງມີຊ່ອງຫວ່າງຫຼາຍເຊັ່ນ: ໂຮງຮຽນ ມີໜ້ອຍເກີນໄປ ແລະ ທັງຍັງຢູ່ຫ່າງໄກອີກດ້ວຍ. ໂຮງຮຽນເຫຼົ່ານີ້ ບໍ່ຕອບສະໜອງຄວາມຕ້ອງການຂອງຜູ້ຢາກຮຽນດ້ານວິຊາຊີບ, ຄຸນນະພາບຂອງການສຶກສາບໍ່ສອດຄ່ອງກັບວຽກໃນປະຈຸບັນ ແລະ ຫຼາຍໂຮງຮຽນຍັງບໍ່ມີລັກສະນະທີ່ຈະສາມາດດັດປັບເຂົ້າກັບສະພາບຄວາມຕ້ອງການ ໂດຍສະເພາະ ໃນດ້ານລະບຽບການຮັບສະໝັກນັກຮຽນ ແລະ ຄວາມຕ້ອງການຂອງຕະຫຼາດ -ລາຍລະອຽດເພີ່ມເຕີມກ່ຽວ ກັບບັນຫານີ້ໃຫ້ ເບິ່ງບົດທີ 6.

ເຫດຜົນທີ່ກ່າວມາຂ້າງເທິງນັ້ນ ໄດ້ຊີ້ໃຫ້ເຫັນເຖິງຄວາມຈໍາເປັນ ໃນການສ້າງຄວາມເຂັ້ມແຂງໃຫ້ແກ່ລະບົບ ການສຶກສາ ແລະ ການພັດທະນາສີມືແຮງງານໃນທຸກລະດັບເພື່ອປັບປຸງສະພາບການຈ້າງງານຂອງແຮງງານທີ່ ມີຢູ່ແລ້ວ ແລະ ແຮງງານທີ່ມີທ່າແຮງ. ເພື່ອຫຼຸດຜ່ອນບັນຫາທີ່ກ່າວມາຂ້າງເທິງນັ້ນ ວິທີທາງໜຶ່ງທີ່ສາມາດເປັນໄປໄດ້ກໍ່ຄືຈັດຕັ້ງການຝຶກອົບຮົມແບບເລັ່ງລັດໄລຍະສັ້ນ ໃຫ້ແກ່ແຮງງານຍັງໜຸ່ມນ້ອຍ. ພ້ອມກັນນັ້ນ, ກໍ່ຄວນປັບປຸງຫຼັກສູດການສຶກສາພາກເຕັກນິກ ແລະ ວິຊາຊີບຄືນໃໝ່ (ເບິ່ງບົດທີ 6 ສໍາລັບອົງປະກອບຂອງການຝຶກອົບຮົມເຫຼົ່ານີ້).

## ປັດໄຈທາງດ້ານຂະໜາດ

ໃນຫຼາຍປັດໄຈທີ່ກະຕຸກຊຸກຍູ້ ຫຼື ກີດໜ່ວງການຂະຫຍາຍໂຕ ຂອງຫົວໜ່ວຍທຸລະກິດບໍ່ແມ່ນກະສິກໍານັ້ນແມ່ນຂຶ້ນກັບທ່າແຮງບົ່ມຊ້ອນ ຂອງຫົວໜ່ວຍທຸລະກິດທີ່ຈະມີຜົນຕໍ່ການຂະຫຍາຍໂຕຂອງຫົວໜ່ວຍທຸລະກິດນັ້ນໆ. ໜຶ່ງໃນບັນດາບັນດາປັດໄຈຍ່ອຍຕ່າງໆກໍ່ຄືຂະໜາດຂອງຫົວໜ່ວຍທຸລະກິດເອງວ່າລະດັບຄວາມສາມາດໃນປະຈຸບັນທີ່ຕົນເອງມີຈະນໍາໃຊ້ເຄື່ອງຈັກເຂົ້າໃນການຜະລິດໃຫ້ສົມສ່ວນກັບເຄື່ອງກົນຈັກທີ່ມີໄດ້ ຫຼື ບໍ່?

ຈໍານວນສະເລ່ຍແຮງງານ (ທີ່ຖືກຈ້າງງານ) ຕໍ່ວິສາຫະກິດທີ່ບໍ່ແມ່ນກະສິກໍາມີພຽງແຕ່ 2.7 ຄົນເທົ່ານັ້ນ. ໃນນັ້ນ, ຫຼາຍກວ່າ 55%

**ຮູບສະແດງ 3.8: ອັດຕາສ່ວນແຮງງານເຮັດວຽກ ໃນຂະແໜງການທີ່ບໍ່ແມ່ນກະສິກຳ ແຈກຢາຍຕາມລະດັບ ການສຶກສາໃນແຕ່ລະຂະແໜງການ, ປີ 2006**




***ໝາຍເຫດ:** 'ການສຶກສາຂັ້ນ 'ວິທະຍາໄລ' ຢູ່ທີ່ນີ້ແມ່ນລວມເອົາຂັ້ນມະຫາວິທະຍາໄລນຳ.*
***ແຫຼ່ງຂໍ້ມູນ:** ຄິດໄລ່ມາຈາກການສຳຫຼວດເສດຖະກິດປີ 2006 (EC06) (GOL (2007c)).*

ເປັນແຮງງານໃນຫົວໜ່ວຍທຸລະກິດທີ່ມີແຮງງານດຽວ ແລະ ປະມານ 95% ແມ່ນຖືກຈັດຢູ່ໃນປະເພດຫົວໜ່ວຍທຸລະກິດ ທີ່ມີການຈ້າງແຮງງານ 5 ຄົນ ຫຼື ໜ້ອຍກວ່ານັ້ນ. ມີພຽງ 44% ຂອງຈຳ ນວນແຮງງານທັງໝົດໄດ້ຮັບເງິນຄ່າຈ້າງ, ນອກນັ້ນ ກໍ່ແມ່ນແຮງງານຄົວເຮືອນທີ່ບໍ່ໄດ້ຮັບຄ່າຈ້າງ (ລວມທັງແຮງງານທີ່ປະກອບອາຊີບອິດສະຫຼະ). ໂດຍພາບລວມແລ້ວ, ສະແດງໃຫ້ເຫັນວ່າ ບັນດາຫົວໜ່ວຍທຸລະກິດເຫຼົ່ານີ້ ບໍ່ສະແດງໃຫ້ເຫັນຮູບແບບວິສາຫະກິດທີ່ມຸ້ງເນັ້ນໃສ່ການຂະຫຍາຍໂຕເລີຍ. ໃນລະດັບແຍກຍ່ອຍລົງມາ, ຂະແໜງການທີ່ບໍ່ແມ່ນກະສິກຳ ເປັນຂະແໜງການຈ້າງແຮງງານປະມານ 10 ຄົນ ຫຼື ຫຼາຍກວ່ານັ້ນ ຊຶ່ງມີອັດຕາສ່ວນຕ່ຳກວ່າ 3% ຂອງຈຳນວນຫົວໜ່ວຍທຸລະກິດທັງໝົດເທົ່ານັ້ນ ແຕ່ພັດກວມເອົາ 37.4% ຂອງແຮງງານໃນຂະແໜງການທີ່ບໍ່ແມ່ນກະສິກຳ, ໃນນັ້ນ ມີ 92% ເປັນແຮງງານຮັບຈ້າງທີ່ບໍ່ໄດ້ຮັບຜົນຕອບແທນແກ່ແຮງງານ. ຫົວໜ່ວຍທຸລະກິດທີ່ມີການຈ້າງແຮງງານປະມານ 2-9 ຄົນ ແມ່ນມີອັດຕາສ່ວນແຮງງານ ກວມປະມານ 42.3%. ສະຫຼຸບແລ້ວ, ຫົວໜ່ວຍທຸລະກິດທີ່ມີການຈ້າງແຮງງານໜຶ່ງຄົນກວມເອົາອັດຕາສ່ວນພຽງແຕ່ 5% ຂອງແຮງງານທັງໝົດໃນຂະແໜງການບໍ່ແມ່ນກະສິກຳ (ຮູບທີ່ 3.11), ນັ້ນກໍ່ຄື ຫົວໜ່ວຍທຸລະກິດທີ່ຈ້າງແຮງງານ 2 ຄົນຂຶ້ນໄປ ເປັນປະເພດຫົວໜ່ວຍທຸລະກິດທີ່ມີທ່າແຮງໃນການສ້າງວຽກເຮັດງານທຳໃຫ້ແກ່ປະຊາຊົນຫຼາຍຂຶ້ນ.

ຫົວໜ່ວຍທຸລະກິດທີ່ຈ້າງແຮງງານ 10 ຄົນ ຫຼື ຫຼາຍກວ່າໄດ້ກວມອັດຕາສ່ວນຫຼາຍກວ່າ 50% ຂອງການຈ້າງງານໃນ 7 ຂະແໜງການຍ່ອຍຈາກ 14 ຂະແໜງການ (ຮູບທີ່ 3.10). ກົງກັນຂ້າມ, ຫົວໜ່ວຍທຸລະກິດທີ່ມີແຮງງານຄົນດຽວມີການຈ້າງແຮງງານພຽງແຕ່ 30% ຂອງການຈ້າງງານທັງໝົດໃນທຸກຂະແໜງການຍົກເວັ້ນຂະແໜງຄ້າຂາຍຍ່ອຍ ແລະ ຂະແໜງການອື່ນໆ ໂດຍທີ່ຫົວໜ່ວຍທຸລະກິດເຫຼົ່ານັ້ນ ເປັນພຽງຫົວໜ່ວຍທຸລະກິດ ທີ່ສ້າງວຽກ

**ຮູບສະແດງ 3.9: ອັດຕາສ່ວນແຮງງານເຮັດວຽກໃນຂະແໜງການທີ່ບໍ່ແມ່ນກະສິກຳແຈກຢາຍຕາມຂະໜາດຫົວໜ່ວຍທຸລະກິດ, ປີ 2006**




***ແຫຼ່ງຂໍ້ມູນ:** ຄິດໄລ່ຈາກການສຳຫຼວດເສດຖະກິດ 2006 (EC06) (GOL (2007c)).*

ເຮັດວຽກທຳໄດ້ໃນຈຳນວນໜ້ອຍ. ແຮງງານສ່ວນໃຫຍ່ແມ່ນຢູ່ໃນຂະແໜງຄ້າຂາຍຍ່ອຍ ທີ່ເປັນທຸລະກິດຄົວເຮືອນ. ເຖິງຢ່າງໃດກໍ່ຕາມ, ຫົວໜ່ວຍທຸລະກິດທີ່ຈ້າງແຮງງານ 2 ຫາ 9 ຄົນຂຶ້ນໄປ ກໍ່ຍັງເປັນປະເພດທີ່ມີອັດຕາສ່ວນການຈ້າງງານຫຼາຍກວ່າໝູ່.

ຫົວໜ່ວຍທຸລະກິດທີ່ມີຂະໜາດໃຫຍ່ກວ່າ ສາມາດເປັນຕົວຂັບເຄື່ອນການຂະຫຍາຍໂຕທາງດ້ານເສດຖະກິດ ແລະ ການສ້າງວຽກເຮັດງານທຳໃຫ້ແກ່ປະຊາຊົນໄດ້ ຍ້ອນວ່າ ວິສາຫະກິດເຫຼົ່ານີ້ ກວມເອົາຂອບເຂດ ສ່ວນໃຫຍ່ຂອງຂະແໜງການຕ່າງໆ ເມື່ອທຽບໃສ່ຫົວໜ່ວຍທຸລະກິດປະເພດອື່ນໆ ເຊັ່ນ: ຫົວໜ່ວຍທຸລະກິດທີ່ມີແຮງງານຜູ້ດຽວ ຊຶ່ງສ່ວນໃຫຍ່ແມ່ນຂະແໜງຄ້າຂາຍຍ່ອຍ. ອີງໃສ່ສະພາບແວດລ້ອມການດຳເນີນທຸລະກິດທີ່ເອື້ອອຳນວຍ, ມີຄວາມເປັນໄປໄດ້ທີ່ຫົວໜ່ວຍທຸລະກິດເຫຼົ່ານີ້ (ປະເພດທີ່ 1 ແລະ 2) ຈະສາມາດຮັບເອົາເຕັກໂນໂລຊີ, ການເຂົ້າເຖິງສິນເຊື່ອ ແລະ ນຳໃຊ້ລະບົບຂໍ້ມູນການຕະຫຼາດເພື່ອເຮັດໃຫ້ຫົວໜ່ວຍທຸລະກິດເຫຼົ່ານີ້ຂະຫຍາຍໂຕໄດ້ໄວຂຶ້ນ. ການເວົ້າແນວນີ້ ບໍ່ໄດ້ໝາຍວ່າ ຫົວຫນ່ວຍທຸລະກິດທີ່ມີແຮງງານຄົນດຽວຈະບໍ່ມີບົດບາດຫຍັງເລີຍຕໍ່ການສ້າງວຽກເຮັດງານທຳໃຫ້ແກ່ປະຊາຊົນ. ໃນຄວາມຈິງແລ້ວ, ຫົວໜ່ວຍທຸລະກິດ ຫຼາຍແຫ່ງທີ່ຈ້າງແຮງງານແຕ່ 2 ຫາ 9 ຄົນ ໃນເບື້ອງຕົ້ນກໍ່ແມ່ນຫົວໜ່ວຍທຸລະກິດທີ່ມີແຮງງານຄົນດຽວ; ນັ້ນກໍ່ຄືຫົວໜ່ວຍທຸລະກິດທີ່ມີແຮງງານຄົນດຽວ ແມ່ນບາດກ້າວທຳອິດເພື່ອກ້າວໄປສູ່ການດຳເນີນທຸລະກິດທີ່ບໍ່ແມ່ນກະສິກຳ[54]. ເພາະສະນັ້ນ, ສິ່ງທ້າທາຍສຳຄັນ ກໍ່ຄື ຄວນກຳນົດນະໂຍບາຍທີ່ເໝາະສົມ ເພື່ອຊຸກຍູ້ສົ່ງເສີມບັນດາຫົວໜ່ວຍທຸລະກິດເຫຼົ່ານີ້ໃຫ້ສາມາດຂະຫຍາຍໂຕໄປໄດ້.

ຂໍ້ຄວນເອົາໃຈໃສ່: ການສຶກສາວິໄຈນີ້ ບໍ່ໄດ້ໝາຍຄວາມວ່າ ຫົວໜ່ວຍທຸລະກິດຂະໜາດໃຫຍ່ເທົ່າໃດຈະມີການຂະຫຍາຍໂຕໄວກວ່າ ຫຼື ມີການຈ້າງງານຫຼາຍເທົ່ານັ້ນ. ຍົກຕົວຢ່າງ, ບໍລິສັດຕ່າງປະເທດຂະໜາດໃຫຍ່ໃນລາວເຮົາ ລ້ວນແລ້ວແຕ່ເປັນບໍລິສັດດຳເນີນການຜະລິດທີ່ເນັ້ນໃສ່ທຶນເປັນຫຼັກຊຶ່ງສ່ວນໃຫຍ່ແລ້ວແມ່ນດຳເນີນທຸລະກິດໃນຂະແໜງອຸດສາຫະກຳຂຸດຄົ້ນ, ແຕ່ບັນດາບໍລິສັດເຫຼົ່ານີ້ ກໍ່ຍັງຖ່າຍໂອນຄວາມຮູ້ດ້ານເຕັກນິກ ວິຊາການ ແລະ ຄວາມສາມາດ (ຖ້າມີ) ໃຫ້ແກ່ລາວເຮົາໄດ້ໜ້ອຍ. ໃນທາງກົງກັນຂ້າມ, ຫົວໜ່ວຍທຸລະກິດຂະໜາດນ້ອຍ ແລະ ກາງສ່ວນໃຫຍ່ທີ່ແມ່ນນັກທຸລະກິດລາວເປັນເຈົ້າຂອງນັ້ນ ຈະຮັກສາຜົນປະໂຫຍດມູນຄ່າເພີ່ມ

**ຮູບສະແດງ 3.10: ອັດຕາສ່ວນແຮງງານ ແຈກຢາຍຕາມຂະໜາດຫົວໜ່ວຍທຸລະກິດ ໃນແຕ່ລະຂະແໜງການຍ່ອຍຂອງຂະແໜງການທີ່ບໍ່ແມ່ນກະສິກຳ (NFEE)**




***ແຫຼ່ງຂໍ້ມູນ:*** *ຄິດໄລ່ຈາກການສຳຫຼວດເສດຖະກິດທົ່ວປະເທດ 2006 (EC06) (GOL (2007c)).*

54 ຜົນການສຶກສາດັ່ງກ່າວ ຍັງພົບໃນການສຳຫຼວດຫົວໜ່ວຍທຸລະກິດ (GTZ (2006)).

## ກ່ອງ 3.5: ການແຈກຢາຍຫົວໜ່ວຍທຸລະກິດທີ່ບໍ່ແມ່ນກະສິກຳຕາມເຂດ ແລະ ພາກ

ການແຈກຢາຍຫົວໜ່ວຍທຸລະກິດທີ່ບໍ່ແມ່ນກະສິກຳຕາມແຕ່ລະເຂດໃນທົ່ວປະເທດລາວມີລະດັບແຕກຕ່າງກັນຫຼາຍ. ການແຈກຢາຍຄືແນວນີ້ແມ່ນສະພາບປົກກະຕິ. ເຂດຕ່າງໆຂອງປະເທດມີຈຳນວນຫົວໜ່ວຍທຸລະກິດບໍ່ເທົ່າກັນຍ້ອນວ່າ ການສ້າງຕັ້ງ ແລະ ດຳເນີນທຸລະກິດ ແມ່ນຂຶ້ນກັບເຂດທີ່ມີປັດໄຈທ່າແຮງບົ່ມຊ້ອນທາງດ້ານທຸລະກິດເທົ່ານັ້ນ. ດັ່ງນັ້ນ, ໃນບັນດາປະເທດທີ່ມີຄວາມຫຼາກຫຼາຍທາງດ້ານກະສິກຳເຊັ່ນ: ປະເທດລາວເຮົາ ເຖິງວ່າຈະມີຂະບວນການເຄື່ອນຍ້າຍແຮງງານໃນໄລຍະຜ່ານມາກໍ່ຕາມ ແຕ່ປະຊາຊົນກໍ່ຍັງບໍ່ສາມາດຫ່າງເຫີນໄປຈາກພື້ນແຜ່ນດິນ, ພາສາປາກເວົ້າ ແລະ ກຸ່ມຊົນເຜົ່າເດີມຂອງຕົນເອງໄດ້. ໃນຕົວຈິງແລ້ວ, ຫົວຫນ່ວຍທຸລະກິດໃນແຕ່ລະທ້ອງຖິ່ນ ແມ່ນມີພຽງບໍ່ພໍເທົ່າໃດແຫ່ງ, ດັ່ງນັ້ນ ຈຶ່ງເຮັດໃຫ້ແຮງງານໃນທ້ອງຖິ່ນໃດໜຶ່ງ ຂາດໂອກາດໃນການຊອກຫາວຽກເຮັດງານທຳ ຊຶ່ງເປັນສາເຫດໃຫ້ເກີດຄວາມທຸກຍາກໃນບາງເຂດ.

ຮູບທີ 3.15 ສະແດງໃຫ້ເຫັນເຖິງການແຈກຢາຍຂອງຫົວໜ່ວຍທຸລະກິດ ທີ່ບໍ່ແມ່ນກະສິກຳ ຕໍ່ພົນລະເມືອງ 1,000 ຄົນສຳລັບຫົວຫນ່ວຍທຸລະກິດທີ່ຈ້າງແຮງງານຫຼາຍກວ່າຫນຶ່ງຄົນ. ມີພຽງແຕ່ 4 ແຂວງເທົ່ານັ້ນທີ່ ກວມ 53% ຂອງຈຳນວນວິສາຫະກິດທີ່ບໍ່ແມ່ນກະສິກຳທັງໝົດ. ອີງຕາມການຈັດແບ່ງການແຈກຢາຍຂອງຂະແໜງ ການທີ່ບໍ່ແມ່ນກະສິກຳ ສະແດງໃຫ້ເຫັນຢ່າງຊັດເຈນວ່າ ແຂວງທີ່ມີການພັດທະນາດີກວ່າມີຈຳນວນຫົວໜ່ວຍທຸລະກິດ (ຂະໜາດນ້ອຍ ແລະ ກາງ) ຫຼາຍກວ່າເມື່ອທຽບກັບແຂວງທີ່ມີການພັດທະນາດ້ອຍກວ່າ - ສຳປະ ສິດຄວາມສຳພັນລະຫວ່າງຄວາມໜາແໜ້ນຂອງຂະແໜງການທີ່ບໍ່ແມ່ນກະສິກຳ ແລະ ຄວາມທຸກຍາກແມ່ນ ມີຄວາມສຳພັນດ້ານລົບ (-) 0.7 ແລະ ໃນທາງສະຖິຕິແລ້ວຈະເຫັນວ່າ ສຳປະສິດນີ້ ໄດ້ເນັ້ນໃຫ້ເຫັນຂະແໜງເສດຖະກິດນອກກະສິກຳ ໄດ້ມີບົດບາດຄວາມສຳຄັນໃນການຫຼຸດຜ່ອນຄວາມທຸກຍາກ. ການພົວພັນດັ່ງ ກ່າວນີ້ ແມ່ນບໍ່ໄດ້ມີພື້ນເຖິງການຮວມ ຫຼື ບໍ່ຮວມເອົາຫົວໜ່ວຍທຸລະກິດຈຸລະພາກແຕ່ຢ່າງໃດ. ເຖິງຢ່າງໃດກໍ່ຕາມ, ຕົວເລກສະຖິຕິ ອັນນີ້ເປັນການຢືນຢັນຕໍ່ຄວາມຄິດເຫັນທີ່ວ່າການນຳເອົາບັນດາຫົວໜ່ວຍທຸລະກິດເຂົ້າໄປສູ່ປະຊາຊົນ ແລະ ນຳເອົາປະຊາຊົນ ເຂົ້າໄປສູ່ຫົວໜ່ວຍທຸລະກິດ ໝາຍເຖິງ ການຫັນເອົາຊົນນະບົດໄປເປັນອຸດສາຫະກຳ.

**ຈຳນວນຕົວເລກຂະແໜງການທີ່ບໍ່ແມ່ນກະສິກຳທີ່ມີແຮງງານສອງຄົນ ຫຼື ຫຼາຍກວ່າຕໍ່ປະຊາ ກອນ 1,000 ຄົນ ຈັດແບ່ງຕາມແຂວງ.**




***ແຫຼ່ງຂໍ້ມູນ:** EC06 (GOL (2007c); ແລະ ການສຳຫຼວດພົນລະເມືອງ ແລະ ທີ່ຢູ່ອາໄສປີ 2005 (GOL (2006a).*

ສ່ວນໃຫຍ່ໃຫ້ແກ່ ສປປ ລາວ. ຂໍ້ຄວນເອົາໃຈໃສ່: ການສຶກສາວິໄນນີ້ ບໍ່ໄດ້ໝາຍຄວາມວ່າ ຫົວໜ່ວຍທຸລະກິດຂະໜາດໃຫຍ່ເທົ່າໃດຈະມີການຂະຫຍາຍໂຕໄວກວ່າ ຫຼື ມີການຈ້າງງານຫຼາຍເທົ່ານັ້ນ. ຍົກຕົວຢ່າງ, ບໍລິສັດຕ່າງປະເທດຂະໜາດໃຫຍ່ໃນລາວເຮົາ ລ້ວນແລ້ວແຕ່ເປັນບໍລິສັດດໍາເນີນການຜະລິດທີ່ເນັ້ນໃສ່ທຶນເປັນຫຼັກ ຊຶ່ງສ່ວນໃຫຍ່ແລ້ວແມ່ນດໍາເນີນທຸລະກິດໃນຂະແໜງອຸດສາຫະກໍາຂຸດຄົ້ນ, ແຕ່ບັນດາບໍລິສັດເຫຼົ່ານີ້ ກໍ່ຍັງຖ່າຍໂອນຄວາມຮູ້ດ້ານເຕັກນິກ ວິຊາການ ແລະ ຄວາມສາມາດ (ຖ້າມີ) ໃຫ້ແກ່ລາວເຮົາໄດ້ໜ້ອຍ. ໃນທາງກົງກັນຂ້າມ, ຫົວໜ່ວຍທຸລະກິດຂະໜາດນ້ອຍ ແລະ ກາງ ສ່ວນໃຫຍ່ທີ່ແມ່ນນັກທຸລະກິດລາວເປັນເຈົ້າຂອງນັ້ນ ຈະຮັກສາຜົນປະໂຫຍດມູນຄ່າເພີ່ມສ່ວນໃຫຍ່ໃຫ້ແກ່ ສປປ ລາວ.

**ກ່ອງ 3.6: ຜົນການສຶກສາດ້ານການດໍາເນີນທຸລະກິດໃນ ສປປ ລາວ ໃນໄລຍະຜ່ານມາ**

1. ຜົນການສໍາຫຼວດຫົວໜ່ວຍທຸລະກິດຂອງ ອົງການເພື່ອການຮ່ວມມືທາງດ້ານເຕັກນິກເຢຍລະມັນ (GTZ) ໃນ ປີ 2006 ມີຄື:
   - ກ. ຂາດການບໍລິການດ້ານການພັດທະນາທຸລະກິດ,
   - ຂ. ການພັດທະນາຂະແໜງການເງິນຍັງຊັກຊ້າ,
   - ຄ. ຄວາມຮູ້ ແລະ ຄວາມເຂົ້າໃຈດ້ານກົດໝາຍຍັງຈໍາກັດ,
   - ງ. ການເຊື່ອມໂຍງທຸລະກິດດ້ວຍກັນ ແລະ ຕ່ອງໂສ້ມູນຄ່າຂອງທຸລະກິດຍັງບໍ່ໄດ້ຮັບ ການພັດທະນາເທົ່າທີ່ຄວນ, ແລະ
   - ຈ. ຂາດການບໍລິການທີ່ມີປະສິດທິຜົນຈາກພາກລັດ. ນອກນັ້ນ, ການສົ່ງເສີມການກະຈາຍຂະແໜງການພາກເອກະຊົນໄປສູ່ພາກຕ່າງໆ ກໍ່ເປັນສິ່ງທີ່ສໍາຄັນ ຊຶ່ງຮຽກຮ້ອງໃຫ້ມີພື້ນຖານໂຄງລ່າງທີ່ດີ ເຊັ່ນ: ການຂົນສົ່ງ, ໄຟຟ້າ ແລະ ອື່ນໆ ໂດຍສະເພາະ ທາງດ້ານແວດລ້ອມການດໍາເນີນທຸລະກິດທີ່ມີຕົ້ນທຶນຕໍ່າ ແລະ ອື່ນໆ.

2. ຜົນການສຶກສາຂອງທະນາຄານໂລກໃນ ປີ 2004 ແລະ ທະນາຄານພັດທະນາອາຊີ-ທະນາຄານໂລກໃນ ປີ 2007:
   - ກ. ພື້ນຖານໂຄງລ່າງຍັງບໍ່ໄດ້ຮັບການພັດທະນາເທົ່າທີ່ຄວນ,
   - ຂ. ຍັງມີການຫຼົບຫຼີກການປະຕິບັດກົດລະບຽບຂອງລັດຖະບານຢູ່,
   - ຄ. ນໍາໃຊ້ນະໂຍບາຍການກໍານົດພາສີແບບຕາມໃຈ,
   - ງ. ເສດຖະກິດມະຫາພາກບໍ່ແນ່ນອນ,
   - ຈ. ຂະແໜງການເງິນຍັງບໍ່ເຂັ້ມແຂງ,
   - ສ. ລະດັບສີມືແຮງງານທົ່ວໄປຍັງຕໍ່າ, ແລະ
   - ຊ. ຂອດການບໍລິຫານຄຸ້ມຄອງຍັງມີຊ່ອງຫວ່າງທີ່ຈະຕ້ອງປັບປຸງໃຫ້ດີຂຶ້ນ.

3. ໃນປີ 2008 ມູນນິທິມໍລະດົກໄດ້ຈັດປະເທດລາວຢູ່ໃນລໍາດັບທີ 137 ຂອງໂລກ ດ້ານສິດເສລີພາບໃນການດໍາເນີນທຸລະກິດ. ໃນຄະແນນເຕັມ 100, ສິດເສລີພາບດ້ານການຄ້າຢູ່ລາວ ແມ່ນມີ 57 ຄະແນນ, ສິດເສລີພາບດ້ານງົບປະມານຈັດຢູ່ໃນລໍາດັບ 71, ຂະໜາດຂອງລັດຖະບານແມ່ນຈັດຢູ່ໃນລໍາດັບທີ91.8,ການ ເປີດເສລີດ້ານເງິນຕາຈັດຢູ່ໃນລໍາດັບທີ 73, ການເປີດເສລີດ້ານການເງິນຈັດຢູ່ໃນລໍາດັບທີ 20, ສິດທິ ດ້ານການຄອບຄອງຊັບສິນແມ່ນຈັດຢູ່ໃນລໍາດັບທີ 10 ແລະ ອື່ນໆ.

***ແຫຼ່ງຂໍ້ມູນ:** GTZ (2006); ADB (2007) ແລະ World Bank (2004); http://www.heritage.org.Index/country*

## ສະພາບແວດລ້ອມ ແລະ ນະໂຍບາຍໃນການດໍາເນີນທຸລະກິດ

ການຫັນເປັນອຸດສາຫະກໍາ ບໍ່ສາມາດຈະອາໃສພຽງແຕ່ທຶນຕ່າງປະເທດຢ່າງດຽວເທົ່ານັ້ນ. ຂະແໜງເອກະຊົນພາຍໃນ (ຄົນລາວເປັນເຈົ້າຂອງ) ຈະຕ້ອງໄດ້ຮັບການຂະຫຍາຍໂຕ ແລະ ສ້າງບົດບາດຂອງຕົນໃນການເປັນຜູ້ນໍາໜ້າເພື່ອຊ່ວຍຮັກສາອັດຕາສ່ວນໃຫຍ່ຂອງມູນຄ່າເພີ່ມໄວ້ໃນປະເທດເຮົາ,ຖ່າຍທອດເຕັກນິກຕ່າງໆ ແລະ ຄວາມຊໍານານໃນການດໍາເນີນທຸລະກິດໃຫ້ກະຈາຍລົງສູ່ທ້ອງຖິ່ນ ແລະ ພ້ອມທັງປ້ອງກັນການດໍາເນີນທຸລະກິດແບບຜູກຂາດນໍາອີກ. ອຸດສາຫະກໍາພາຍໃນ (ຄົນລາວເປັນເຈົ້າຂອງ) ຍັງສາມາດຂະຫຍາຍຄວາມສາມາດ ແລະ ທັກສະສີມື ທາງດ້ານທຸລະກິດ ແລະ ດ້ານເຕັກນິກ ແລະ ທັງຍົກລະດັບຄວາມເຊື່ອໝັ້ນໃຫ້ແກ່ປະຊາຊົນທົ່ວໄປນໍາອີກ.

ພາກເອກະຊົນພາຍໃນ (ທີ່ເຂັ້ມແຂງທາງດ້ານເຕັກນິກ) ຍັງມີລະດັບ ແລະ ຂະໜາດນ້ອຍຢູ່ ເຊັ່ນ: ຈາກຂໍ້ມູນການສໍາຫຼວດເສດຖະກິດຂອງ ສປປ ລາວ ໃນ ປີ 2006 ສະແດງໃຫ້ເຫັນວ່າ ອັດຕາສ່ວນການລົງທຶນພາຍໃນ ກວມເອົາແຕ່ 13% ຂອງການລົງທຶນທັງໝົດເທົ່ານັ້ນ. ບໍລິສັດບໍ່ແຮ່ເກືອບທັງໝົດເປັນບໍລິສັດທີ່ມີຄົນຕ່າງປະເທດເປັນເຈົ້າຂອງ ແລະ ເປັນຜູ້ບໍລິຫານ ແຕ່ກໍ່ມີລັດຖະບານລາວ/ພາກສ່ວນອື່ນໆຖືຫຸ້ນເປັນສ່ວນໜ້ອຍ. ໃນລັກສະນະເຊັ່ນດຽວກັນ, ໃນຂະແໜງຕັດຫຍິບ ໃນຈໍານວນໂຮງງານຕັດຫຍິບ 54 ແຫ່ງທີ່ສົ່ງອອກ (ໃນ ປີ 2008) ມີໂຮງງານພຽງແຕ່ 12 ແຫ່ງເທົ່ານັ້ນ ທີ່ມີຄົນລາວເປັນຜູ້ບໍລິຫານ. ຍັງມີບໍລິສັດຕ່າງປະເທດຫຼາຍແຫ່ງ ທີ່ຍັງບໍ່ທັນສາມາດ "ເຂົ້າເຖິງໄດ້" ເຖິງແມ່ນວ່າບໍລິສັດເຫຼົ່ານີ້ ຈະດໍາເນີນທຸລະກິດໃນລາວມາແຕ່ດົນນານຫຼາຍ ກວ່າ 12-15 ປີ ແລ້ວກໍ່ຕາມ. ສິ່ງທ້າທາຍສໍາຄັນອັນໜຶ່ງ ກໍ່ແມ່ນ ການພັດທະນາອຸດສາຫະກໍາທີ່ຄົນໃນຊາດເປັນເຈົ້າຂອງ ແລະ ມີການຄວບຄຸມໂດຍຄົນລາວໃນທຸກກິດຈະກໍາ.

ນາຍົກລັດຖະມົນຕີ ໄດ້ອອກດໍາລັດວ່າດ້ວຍ ການສົ່ງເສີມຫົວໜ່ວຍທຸລະກິດຂະໜາດນ້ອຍ ແລະ ກາງ ໃນເດືອນເມສາ ປີ 2004 ຊຶ່ງໃນນັ້ນ ການຝຶກອົບຮົມ, ການຕະຫຼາດ ແລະ ການເຂົ້າເຖິງການເງິນ ແມ່ນໄດ້ລະບຸໄວ້ໃນດໍາລັດຢ່າງຈະແຈ້ງ. ນອກຈາກນັ້ນ, ກອງທຶນສົ່ງເສີມຫົວໜ່ວຍທຸລະກິດຂະໜາດນ້ອຍ ແລະ ກາງ ກໍ່ໄດ້ຮັບການສ້າງຕັ້ງຂຶ້ນ ໂດຍເປັນໄປຕາມດໍາລັດຂອງນາຍົກລັດຖະມົນຕີ. ໃນ ປີ 2005, ກົດໝາຍວ່າດ້ວຍຫົວໜ່ວຍທຸລະກິດ ຊຶ່ງເປັນກົດໝາຍທີ່ມາແທນ ກົດໝາຍທຸລະກິດ ໃນ ປີ 1994 ກໍ່ໄດ້ຮັບການປະກາດໃຊ້ຢ່າງເປັນທາງການ. ດັ່ງທີ່ ທ່ານ ສຸລິວົງ ດາລາວົງ (ລັດຖະມົນຕີຜູ້ຊີ້ງຄຸນອຸດທິ) ໄດ້ກ່າວໄວ້ວ່າ "ຈຸດປະສົງຂອງກົດໝາຍສະບັບໃໝ່ນີ້ ແມ່ນເພື່ອກໍ່ໃຫ້ເກີດການປ່ຽນແປງຢ່າງແທ້ຈິງ... ໃນການລົງທະບຽນຫົວໜ່ວຍທຸລະກິດ ແລະ ການໃຫ້ອະນຸຍາດດໍາເນີນທຸລະກິດ ເພື່ອສົ່ງເສີມການລົງທຶນ...ການລົງທຶນເພີ່ມຂຶ້ນຫຼາຍເທົ່າໃດກໍ່ຍິ່ງສາມາດສ້າງວຽກເຮັດງານທໍາໃຫ້ແກ່ປະຊາຊົນໄດ້ຫຼາຍຂຶ້ນເທົ່ານັ້ນ... ແລະ ຈະນໍາມາຊຶ່ງຄວາມຮັ່ງມີໃຫ້ແກ່ປະຊາຊົນ...". ເຫັນໄດ້ວ່າ ລັດຖະບານ ໄດ້ມີການສົ່ງເສີມຢ່າງແທ້ຈິງ. ເຖິງຢ່າງໃດກໍ່ຕາມ, ການຈັດຕັ້ງປະຕິບັດຕົວຈິງຍັງຈໍາເປັນຕ້ອງໄດ້ຮັບການເອົາໃຈໃສ່ຢ່າງເຂັ້ມງວດ.

ປະເທດລາວ ເປັນປະເທດທີ່ອີງໃສ່ການຜະລິດກະສິກໍາເປັນຫຼັກມາຕັ້ງແຕ່ດົນນານແລ້ວ. ພາຍຫຼັງໄດ້ສະຖາປະນາເປັນ ສປປ ລາວ, ເສດຖະກິດຂອງລາວກໍ່ຍັງອີງໃສ່ລັດວິສາຫະກິດເປັນຕົ້ນຕໍຈົນມາຮອດປີ 1986, ແລະ ມາຮອດປະຈຸບັນນີ້ ກໍ່ຍັງມີຫົວໜ່ວຍລັດວິສາ

ທະກິດຈຳນວນຫຼວງຫຼາຍຢູ່. ຂະແໜງການເງິນຍັງອ່ອນນ້ອຍຢູ່ ແລະ ມີຂະໜາດນ້ອຍຄືກັນກັບຂະໜາດຂອງຕະຫຼາດພາຍໃນ. ນອກນັ້ນ, ທັກສະຄວາມສາມາດດ້ານການ ຄຸ້ມຄອງເຕັກໂນໂລຊີ ຫາກໍ່ຢູ່ໃນໄລຍະການພັດທະນາຈາກຈຸດເລີ່ມຕົ້ນທີ່ມີພື້ນຖານຕ່ຳ. ກົດໝາຍຕ່າງໆທີ່ສົ່ງເສີມການລົງທຶນພາກເອກະຊົນຫາກໍ່ໄດ້ນຳໃຊ້ມາບໍ່ເກີນ 5 ປີ. ການພັດທະນາພາກເອກະຊົນຢ່າງເຕັມຮູບແບບແມ່ນຂະບວນການທີ່ຄ່ອຍເປັນຄ່ອຍໄປ ເຖິງແມ່ນວ່າໃນຄວາມເປັນຈິງຍັງສາມາດພັດທະນາໄດ້ໄວກວ່ານີ້ກໍ່ຕາມໂດຍສະເພາະການສ້າງສິ່ງແວດລ້ອມທີ່ເອື້ອອຳນວຍ.

ບາງວຽກງານຕົ້ນຕໍທີ່ຄວນພິຈາລະນາ ແລະ ຈັດຕັ້ງປະຕິບັດມີດັ່ງລຸ່ມນີ້:

1. ເພື່ອຫຼຸດຜ່ອນຕົ້ນທຶນທາງດ້ານພື້ນຖານໂຄງລ່າງ, ທາງເລືອກໜຶ່ງທີ່ໄດ້ປະຕິບັດທົດລອງກັນມາ ແລະ ໄດ້ຮັບຜົນສຳເລັດໃນຫຼາຍໆບ່ອນມາແລ້ວ ຄື: ການສ້າງຕັ້ງເຂດເສດຖະກິດພິເສດອີງໃສ່ຄວາມຕ້ອງການເປັນຫຼັກທີ່ໄດ້ຮັບການພັດທະນາໂດຍການມີສ່ວນຮ່ວມຂອງພາກເອກະຊົນ. ຖ້າວ່າ ການສ້າງຕັ້ງເຂດພິເສດດັ່ງກ່າວຫາກບໍ່ອີງໃສ່ຄວາມຕ້ອງການເປັນຫຼັກແລ້ວ ກໍ່ຈະເຮັດໃຫ້ມີຂີດຄວາມສາມາດບໍ່ຖືກນຳໃຊ້ໃນວຽກງານບາງດ້ານແຕ່ໃນວຽກງານດ້ານອື່ນຊ້ຳພັດຂາດຂີດຄວາມສາມາດ ແລະ ສຸດທ້າຍ ກໍ່ເຮັດໃຫ້ເກີດການສິ້ນເປືອງຊັບພະຍາກອນຊື່ໆ.

2. ການປະຕິບັດ 'ວິທີການທີ່ຖືເອົາການເຕີບໂຕເປັນໃຈກາງ' ສາມາດເປັນປະໂຫຍດຕໍ່ການຫັນເຂດສະເພາະໃດໜຶ່ງເປັນເຂດອຸດສາຫະກຳ.

3. ການລະດົມທຶນເຂົ້າໃນການພັດທະນາເຂດທ້ອງຖິ່ນ (ໂດຍຜ່ານສະຖາບັນສິນເຊື່ອຈຸລະພາກ ຫຼື ກອງທຶນພັດທະນາບ້ານ) ເປັນສິ່ງສຳຄັນຫຼາຍທີ່ສຸດ. ທຶນປະຢັດເຫຼົ່ານີ້ ຄວນນຳໄປໃຊ້ເຂົ້າໃນການລົງທຶນ. ອີກແນວຄວາມຄິດໜຶ່ງທີ່ມີຄວາມເປັນໄປໄດ້ແມ່ນການລົງທຶນໃນຕະຫຼາດຫຸ້ນ.

4. ຄວນມີນະໂຍບາຍ ແລະ ປະຕິບັດສິ່ງຈູງໃຈພິເສດພາຍໃຕ້'ຂົງເຂດການຊຸກຍູ້ສົ່ງເສີມອຸດສາຫະກຳອ່ອນນ້ອຍ' ທີ່ສາມາດຂະຫຍາຍນະໂຍບາຍ ແລະ ສິ່ງຈູງໃຈດັ່ງກ່າວໃຫ້ໄປເຖິງຫົວໜ່ວຍທຸລະກິດທ້ອງຖິ່ນຂະໜາດນ້ອຍ ແລະ ຂະໜາດກາງ. ໄປຄຽງຄູ່ກັບການປ່ອຍເງິນກູ້ຂອງທະນາຄານ ດັ່ງທີ່ໄດ້ກ່າວມາໃນເບື້ອງຕົ້ນນັ້ນ, ການກຳນົດລະບຽບການໃຫ້ມີຄວາມກະທັດຮັດຂຶ້ນ ເຊັ່ນ: ສິ່ງອຳນວຍຄວາມສະດວກຜ່ານລະບົບປະຕູດຽວກໍ່ແມ່ນບາດກ້າວໜຶ່ງທີ່ສຳຄັນ. ໃນຄວາມເປັນຈິງ, ການຫຼີບຫຼີກການຂຶ້ນທະບຽນອຸດສາຫະ ກຳຕາມແຕ່ລະຂັ້ນ (ທີ່ບໍ່ແມ່ນຂະແໜງອຸດສາຫະກຳບູລິມະສິດ) ຄວນໄດ້ຮັບການພິຈາລະນາຢ່າງຮອບຄອບ .

5. ຄວນສ້າງຕັ້ງຄະນະກຳມະການຮ່ວມ ລະຫວ່າງ ລັດຖະບານ ແລະ ພາກເອກະຊົນຂຶ້ນມາເພື່ອປຶກສາຫາລືກ່ຽວກັບການສົ່ງເສີມທຸລະກິດ.

6. ຄວນພິຈາລະນາເຊື້ອເຊີນເອົາພາກເອກະຊົນເຂົ້າມາລົງທຶນໃນກິດຈະກຳການຜະລິດ ເຊື່ອມຕໍ່ກັບອຸດສາຫະກຳໂຄງການບໍ່ແຮ່ ແລະ ພະລັງງານໄຟຟ້ານ້ຳຕົກໂດຍຖືເອົາການແຂ່ງຂັນເປັນຫຼັກ.

7. ຄວນຊຸກຍູ້ສົ່ງເສີມສະມາຄົມນັກທຸລະກິດໃນປະຈຸບັນໃຫ້ມີຄວາມເຂັ້ມແຂງ ແລະ ຈັດກອງປະຊຸມປຶກສາຫາລືແລກປ່ຽນປະສົບການດ້ານທຸລະກິດ ເຊັ່ນ: ສະພາສົ່ງເສີມການຝຶກອົບຮົມແຫ່ງຊາດ, ຄະນະກຳມະການດ້ານການພັດທະນາ ແລະ ສົ່ງເສີມທຸລະກິດຂະໜາດນ້ອຍ ແລະ ກາງ (SME), ຈັດຕັ້ງກອງປະຊຸມ ນັກທຸລະກິດລາວ ແລະ ອື່ນໆ. ນອກຈາກນັ້ນ, ກໍ່ຄວນສົ່ງເສີມພາກເອກະຊົນ ໃຫ້ມີສ່ວນຮ່ວມໃນການຕັດສິນໃຈຕໍ່ກັບການລົງທຶນຂອງພາກລັດ ແລະ ບັນຫາທຸລະກິດ ແລະ ການຄ້າອື່ນໆ.

8. ຄວນມີລະບົບເຜີຍແຜ່ການຝຶກອົບຮົມດ້ານການປະກອບການ ແລະ ສົ່ງເສີມການເລີ່ມດຳເນີນທຸລະກິດ.

ລັດຖະບານ ຄວນສຶກສາຄວາມເປັນໄປໄດ້ໃນການຜັນຂະຫຍາຍປະສົບການຜະລິດແບບ "ໜຶ່ງເມືອງໜຶ່ງຜະລິດຕະພັນ" ຈາກເຂດທົດລອງຢູ່ ແຂວງສາລະວັນ ແລະ ສະຫວັນນະເຂດ ເພື່ອສົ່ງເສີມກິດຈະກຳທີ່ບໍ່ແມ່ນກະສິກຳ. ນອກຈາກນີ້ ກໍ່ຄວນພິຈາລະນາສ້າງຕັ້ງກຸ່ມປຸງແຕ່ງຜະລິດຕະພັນກະສິກຳຂຶ້ນມາ. ເຖິງຢ່າງໃດກໍ່ຕາມ, ກ່ອນຈັດຕັ້ງປະຕິບັດຄວນມີການສຶກສາຄົ້ນຄວ້າປະສົບການຢ່າງລະອຽດ.

## *ສະຫຼຸບຫຍໍ້:*

1. *ລະດັບການສຶກສາ ແລະ ການຝຶກອົບຮົມຂອງແຮງງານຍັງຢູ່ໃນລະດັບບໍ່ສູງພຽງພໍ ແລະ ຍັງບໍ່ແທດເໝາະກັບອຸດສາຫະກຳທີ່ມີມູນຄ່າເພີ່ມສູງ. ເຖິງແມ່ນວ່າ ໃນອຸດສະຫະກຳສົ່ງອອກເຊັ່ນ: ແຮງງານໃນອຸດສາຫະກຳຕັດຫຍິບ ຕ່ຳກວ່າ 10% ມີລະດັບການສຶກສາຊັ້ນສູງ, ລະດັບເຕັກນິກ ຫຼື ວິຊາຊີບແຕ່ລະດັບການສຶກສາດັ່ງກ່າວ ຍັງບໍ່ທັນສູງພໍທີ່ຈະສ້າງຄວາມໄດ້ປຽບໃນການແຂ່ງຂັນ.*

2. *ຄຸນນະພາບຂອງການສຶກສາໃນນັ້ນລວມທັງ ການສຶກສາສາຍສາມັນ ແລະ ວິຊາຊີບ ຍັງມີຊ່ອງຫວ່າງຫຼາຍ. ສະນັ້ນ, ຄວນເອົາໃຈໃສ່ຕໍ່ເບື້ອງການສະໜອງ ແລະ ເບື້ອງຄວາມຕ້ອງການໄປພ້ອມໆກັນ. ບັນຫາດັ່ງກ່າວນີ້ສາມາດແກ້ໄຂໄດ້ໂດຍການສະໜອງການຝຶກອົບຮົມແບບເລັ່ງລັດ ໂດຍແນໃສ່ລະດັບແຕກຕ່າງກັນ (ເບິ່ງບົດທີ 6).*

3. *ຂະໜາດສະເລ່ຍຂອງຫົວໜ່ວຍທຸລະກິດ ຄວນໄດ້ຮັບການຂະຫຍາຍໂຕ ຢ່າງໄວວາ. ເພື່ອສົ່ງເສີມພາກສ່ວນເອກະຊົນພາຍໃນ ໃຫ້ສາມາດຊ່ວຍຫົວໜ່ວຍທຸລະກິດ ໃຫ້ຂະຫຍາຍໂຕໄດ້ຢ່າງໄວວານັ້ນ, ສິ່ງສຳຄັນ ກໍ່ຕ້ອງມີນະໂຍບາຍສະເພາະແບບຄົບຊຸດ.*

4. *ຂັ້ນຕອນ ຫຼື ນະໂຍບາຍພິເສດ ທີ່ປະຕິບັດໄດ້ຜົນມາແລ້ວໃນປະເທດອື່ນໆກໍ່ຄືການສ້າງຕັ້ງເຂດເສດຖະກິດພິເສດທີ່ອີງໃສ່ຄວາມຕ້ອງການ, ການລະດົມເງິນປະຢັດເພື່ອໃຊ້ເຂົ້າໃນການລົງທຶນ, ການດຳເນີນຕາມວິທີການທີ່ຖືເອົາການເຕີບໂຕເປັນໃຈກາງ, ເຮັດໃຫ້ຂັ້ນຕອນລະບຽບການ ມີຄວາມກະທັດຮັດລົງ ແລະ ອື່ນໆ. ເຊື່ອວ່າວິທີການ ແລະ ນະໂຍບາຍດັ່ງກ່າວມານີ້ຈະສາມາດປະຕິບັດໄດ້ຜົນດີຢູ່ໃນລາວ.*

## ຂໍ້ສະເໜີແນະຕົ້ນຕໍ

1. ຄວນສຸມຄວາມພະຍາຍາມເພື່ອຮັບປະກັນ ແລະ ສ້າງຄວາມເຂັ້ມແຂງໃຫ້ແກ່ອຸດສາຫະກຳເຊື່ອມຕໍ່, ອຸດສາຫະກຳ ແລະ ການບໍລິການປິ່ນອ້ອມຕ່າງໆທີ່ມີການສ້າງວຽກເຮັດງານທຳຕໍ່າຢູ່ລາວໃນປະຈຸບັນ. ລັດຖະບານ ຄວນປະຕິບັດນະໂຍບາຍຕ່າງໆ ເພື່ອຊຸກຍູ້ສົ່ງເສີມພາກເອກະຊົນພາຍໃນໂດຍສະເພາະກໍ່ແມ່ນວິສາຫະກິດຂະໜາດນ້ອຍ ແລະ ຂະໜາດກາງທີ່ຄົນລາວເປັນເຈົ້າຂອງ.

2. ຄວນເອົາໃຈໃສ່ພິເສດໃນການຖ່າຍທອດເຕັກໂນໂລຊີໃຫ້ແກ່ພະນັກງານວິຊາການທ້ອງຖິ່ນໃນຖານະທີ່ເປັນສ່ວນໜຶ່ງຂອງການເສີມສ້າງຄວາມອາດສາມາດ (ໂດຍຜ່ານບໍລິສັດບໍ່ແຮ່ສາກົນທີ່ໄດ້ຮັບສຳປະທານ) ໃນຂະແໜງການບໍ່ແຮ່.

3. ການກະຈາຍວຽກງານສີມືແຮງງານຕໍ່າຂອງໂຄງການພັດທະນາຂະໜາດໃຫຍ່ໄປສູ່ເສດຖະກິດທ້ອງຖິ່ນຈະຊ່ວຍສ້າງຄວາມຫຼາກຫຼາຍໃຫ້ແກ່ເສດຖະກິດທ້ອງຖິ່ນ ແລະ ທັງເປັນການສ້າງວຽກເຮັດງານທຳໃຫ້ແກ່ປະຊາຊົນໄດ້ຫຼາຍຂຶ້ນເຊັ່ນ: ການຜະລິດອາຫານ (ສະໜອງໃຫ້ແກ່ພະນັກງານໂຄງການ), ການສ້ອມແປງກົນຈັກ ແລະ ການຂົນສົ່ງເປັນຕົ້ນ. ໃນດ້ານນີ້, ລັດຖະບານ ຄວນມີມາດຕະການ ເພື່ອຮັບປະກັນການນຳໃຊ້ຊັບພະຍາ ກອນທ້ອງຖິ່ນໃຫ້ເກີດປະໂຫຍດສູງສຸດ.

4.1 ນອກຈາກນັ້ນ, ຂະແໜງການຍ່ອຍເຊັ່ນ: ຕໍ່າແຜ່ນແພ, ຕັດຫຍິບ, ອຸດສາຫະກຳໄມ້, ອຸດສາຫະກຳປຸງແຕ່ງອາຫານ, ຂົນສົ່ງ, ການຄ້າ ແລະ ການທ່ອງທ່ຽວ ລ້ວນແລ້ວແຕ່ແມ່ນຂະແໜງການທີ່ມີທ່າແຮງໃນການສ້າງວຽກເຮັດງານທຳໃຫ້ແກ່ປະຊາຊົນໄດ້ຫຼາຍເຊັ່ນກັນຖ້າຫາກວ່າລັດຖະບານປະຕິບັດມາດຕະການນະໂຍບາຍໃຫ້ບູລິມະສິດ ເພື່ອສົ່ງເສີມວຽກງານຕ່າງໆເຊັ່ນ: ການເພີ່ມຂະໜາດພື້ນຖານໂຄງລ່າງຂຶ້ນ, ປັບປຸງທຶນມະນຸດ, ຫຼຸດຜ່ອນຕົ້ນທຶນ, ເພີ່ມຄວາມສາມາດແຂ່ງຂັນ ແລະ ຊອກຫາຕະຫຼາດສາກົນ. ແນ່ນອນວ່າແຕ່ລະຂະແໜງການຍ່ອຍເຫຼົ່ານີ້ ລ້ວນແຕ່ມີບັນຫາສະເພາະຂອງໃຜມັນຊຶ່ງຈະຕ້ອງໄດ້ຮັບການແກ້ໄຂ.

4.2 ຂະແໜງການຈຸລະພາກ ກໍ່ມີຄວາມຕ້ອງການຮູບແບບ ການສະໜອງດ້ານການບໍລິການທີ່ແຕກຕ່າງ ເນື່ອງຈາກວ່າ ມີຮູບການ ແລະ ລັກສະນະທາງການຈັດຕັ້ງກໍ່ບໍ່ຄືກັນ, ຕົວຢ່າງວ່າສິນເຊື່ອຈຸລະພາກ ກໍ່ມີຄວາມແຕກຕ່າງໄປຈາກທະນາຄານ. ອີກດ້ານໜຶ່ງ, ການຝຶກອົບຮົມໃຫ້ແກ່ຜູ້ປະກອບການ ກໍ່ແມ່ນວິທີໜຶ່ງທີ່ຈະຊ່ວຍກະຕຸກຊຸກຍູ້ໃຫ້ຂະແໜງຈຸລະພາກຂະຫຍາຍໂຕໄດ້ດີ.

5. ການປັບປຸງແກ້ໄຂບັນຫາກ່ຽວກັບຜະລິດຕະພາບກະສິກຳເປັນປັດໄຈສຳຄັນ ຊຶ່ງວຽກງານນີ້ ບໍ່ພຽງແຕ່ເປັນ ເງື່ອນໄຂຈຳເປັນເບື້ອງຕົ້ນ ແລະ ເປັນສ່ວນປະກອບໜຶ່ງ ຕໍ່ກັບການຫັນເປັນອຸດສາຫະກຳເທົ່ານັ້ນ ແຕ່ຫາກຍັງເປັນການຍົກລະດັບລາຍໄດ້ ຂອງຄອບຄົວຊາວກະສິກອນນຳອີກດ້ວຍ. ຮູບແບບທີ່ໄດ້ສະເໜີ ເພື່ອປັບປຸງຜະລິດຕະພາບກະສິກຳໃນທີ່ນີ້ປະກອບດ້ວຍ: ການຮັບປະກັນການເຊົ່າທີ່ດິນ, ການຫຼຸດຜ່ອນການຕັດແບ່ງທີ່ດິນ ອອກເປັນຕອນນ້ອຍໆ, ການສະໜອງແນວພັນປັບປຸງ ແລະ ຝຸ່ນເຄມີຊີວະພາບ, ການສົ່ງເສີມຮູບແບບລະບົບກະສິກຳ, ສົ່ງເສີມການຕະຫຼາດ ແລະ ຮັບປະກັນສະເຖຍລະພາບຂອງລາຄາ ຕົວຢ່າງ: ການເຮັດສັນຍາດ້ານກະສິກຳ ແລະ ຈັດຕັ້ງສະມາຄົມຊາວກະສິກອນເພື່ອຕໍ່ລອງດ້ານລາຄາ, ຊົນລະປະທານ, ສິນເຊື່ອ ແລະ ອື່ນໆ ໂດຍຖືເອົາແຂວງທີ່ຢູ່ຫ່າງໄກ ແລະ ຊາວກະສິກອນເພດຍິງ ມາເປັນກຸ່ມເປົ້າໝາຍ. ການພັດທະນາໂຄງການປູກພືດອຸດສາຫະກຳຂະໜາດໃຫຍ່ເພື່ອການຄ້າ ຄວນສົ່ງເສີມໃຫ້ມີຢູ່ສະເພາະແຕ່ໃນເຂດທີ່ມີຜົນກະທົບທາງລົບໜ້ອຍທີ່ສຸດຕໍ່ທີ່ຢູ່ອາໄສ ແລະ ການດຳລົງຊີວິດຂອງປະຊາຊົນ.

6. ມີຂໍ້ສະເໜີຫຼາຍຢ່າງທີ່ໄດ້ຍົກຂຶ້ນມາເພື່ອໃຫ້ບັງຄັບໃຊ້ກົດໝາຍວ່າດ້ວຍວິສາຫະກິດ ປີ 2005 ເພື່ອສົ່ງເສີມການຂະຫຍາຍໂຕຂອງພາກເອກະຊົນ ເຊັ່ນ: ການສ້າງຕັ້ງກອງທຶນພິເສດ ສຳລັບການພັດທະນາ ຫົວໜ່ວຍທຸລະກິດຂະໜາດນ້ອຍ ແລະ ກາງ ຫຼື ການຈັດຕັ້ງກອງປະຊຸມລະຫວ່າງພາກເອກະຊົນ ແລະ ພາກລັດຂຶ້ນ ເພື່ອປຶກສາຫາລືກ່ຽວກັບຍຸດທະສາດການລົງທຶນ. ແຕ່ກໍ່ຍັງມີຄວາມຈຳເປັນ ຕ້ອງໄດ້ຊຸກຍູ້ການຈັດຕັ້ງປະຕິບັດຕົວຈິງຕາມຂໍ້ສະເໜີດັ່ງກ່າວໃຫ້ມີຄວາມເຂັ້ມແຂງ ແລະ ໜັກແໜ້ນຕື່ມ.

7. ການສ້າງຕັ້ງເຂດເສດຖະກິດພິເສດ ທີ່ອີງໃສ່ຄວາມຕ້ອງການເປັນຕົ້ນຕໍ ເພື່ອລະດົມເງິນຝາກປະຢັດໃຫ້ແກ່ການລົງທຶນ ແລະ ການສ້າງຕັ້ງສະຖາບັນຄົ້ນຄວ້າຝຶກອົບຮົມ ແລະ ການວິໄຈກ່ຽວກັບບໍ່ແຮ່ ແລະ ທໍ ລະນີສາດ ແມ່ນຂໍ້ສະເໜີແນະສຳຄັນທີ່ຄວນນຳໄປພິຈາລະນາ.

## ເອກະສານຊ້ອນທ້າຍ 3.1:

# ຕົວປ່ຽນສຳຄັນສຳລັບການສຶກສາວິໄຈດ້ານແຮງງານ

ອີງໃສ່ການເກັບກຳສະພາບແຮງງານຢູ່ໃນ ສປປ ລາວ, ໂດຍທົ່ວໄປແລ້ວຈະເຫັນໄດ້ວ່າ ແຮງງານສ່ວນໃຫຍ່ ແມ່ນກຸ່ມຄົນທີ່ມີອາຍຸ 10 ປີ ແລະ ສູງກວ່ານັ້ນ. ເຖິງຢ່າງໃດກໍ່ຕາມ, ທາງດ້ານກົດໝາຍແລ້ວໃນທຸກປະເທດ, ປະຊາຊົນທີ່ສາມາດເຮັດວຽກງານໄດ້ແມ່ນຈະຕ້ອງມີອາຍຸແຕ່ 15 (ຫຼື 18) ປີ ຂຶ້ນເມືອໂດຍອີງຕາມແຕ່ລະປະເພດຂອງວຽກງານ. ສ່ວນເກນອາຍຸສູງສຸດໃນການເຮັດວຽກງານແມ່ນ 60 ຫຼື 64 ປີ (ສຳລັບແຮງງານທີ່ລັດຖະບານໄດ້ໃຫ້ຄ່າຕອບແທນ), ແລະ ສຳລັບແຮງງານທີ່ປະກອບອາຊີບອິດສະຫຼະ ຈະບໍ່ມີການຈຳກັດອາຍຸແຕ່ກໍ່ອີງຕາມລັກສະນະສະເພາະຂອງແຕ່ລະປະເທດ. ແຕ່ວ່າບໍ່ແມ່ນວ່າ ໝົດທຸກຄົນຈະເຮັດວຽກການຕະຫຼາດ, ຫຼາຍຄົນຍັງຕ້ອງການເຮັດໜ້າທີ່ເປັນແມ່ບ້ານ, ເປັນນັກສຶກສາ, ແລະ ອື່ນໆ. ນອກຈາກນັ້ນ, ຍັງມີກຸ່ມທີ່ບໍ່ໄດ້ຈັດຢູ່ໃນປະເພດແຮງງານ ຊຶ່ງອາດຍ້ອນເຫດຜົນທີ່ກ່ຽວຂ້ອງກັບສະພາບຮ່າງກາຍ ຫຼື ຈິດໃຈ ຫຼື ປະເພນີວັດທະນະທຳ/ສາດສະໜາ. ລະບົບສະຖິຕິຂອງລາວ ໄດ້ຮວບຮວມເອົາສະຖິຕິກ່ຽວກັບແຮງງານທີ່ມີອາຍຸຕັ້ງແຕ່ 10 ປີ ຂຶ້ນເມືອ. ໃນນັ້ນ, ກຸ່ມແຮງງານທີ່ມີອາຍຸ 10 -14 ປີ ແມ່ນຈັດເຂົ້າໃນປະເພດແຮງງານເດັກ, ສ່ວນກຸ່ມແຮງງານທີ່ມີອາຍຸ 15 ປີ ແລະ ສູງກວ່າແມ່ນຈັດເຂົ້າໃນປະເພດແຮງງານຜູ້ໃຫຍ່.

'ວຽກ' ໝາຍເຖິງ ກິດຈະກຳທີ່ບຸກຄົນຜູ້ໜຶ່ງໄດ້ດຳເນີນໃນຂອບເຂດຕະຫຼາດແຮງງານເຊັ່ນ: ເຮັດວຽກເພື່ອສ້າງມູນຄ່າເພີ່ມ ແລະ ຈາກນັ້ນກໍ່ນຳໄປແລກປ່ຽນເອົາຄ່າຈ້າງ/ລາຍໄດ້ ຫຼື ໃນຮູບແບບອື່ນໆເຊັ່ນ: ຄ່າຊົດເຊີຍເປັນເງິນສົດ ຫຼື ວັດຖຸສິ່ງຂອງ.

ອັດຕາສ່ວນການເຂົ້າຮ່ວມການເຮັດວຽກ (ບາງຄັ້ງກໍ່ເອີ້ນວ່າອັດຕາການເຂົ້າຮ່ວມຂອງແຮງງານ) ແມ່ນອັດຕາສ່ວນຂອງປະຊາກອນທີ່ເຂົ້າຮ່ວມກິດຈະກຳທາງເສດຖະກິດຢ່າງຕັ້ງໜ້າ ເຊັ່ນ: ບຸກຄົນທີ່ເຮັດວຽກບວກກັບບຸກຄົນທີ່ກຳລັງຊອກວຽກ ແລະ ບຸກຄົນທີ່ກຳລັງຢູ່ໃນກຸ່ມອາຍຸເຮັດວຽກ.

'ຜູ້ທີ່ຖືກຈ້າງງານ' ແມ່ນຜູ້ທີ່ເຮັດວຽກ 40 ຊົ່ວໂມງ ຫຼື ຫຼາຍກວ່າຕໍ່ 1 ອາທິດບໍ່? ຄຳຖາມດັ່ງກ່າວນີ້ມີຄວາມສອດຄ່ອງກັບປະເທດອຸດສາຫະກຳທີ່ມີແຮງງານສ່ວນໃຫຍ່ເປັນແຮງງານຮັບເງິນເດືອນ ຫຼື ເງິນຄ່າຈ້າງ. ແຕ່ ສຳລັບລາວເຮົາແລ້ວ, ປະຊາຊົນສ່ວນໃຫຍ່ ແມ່ນຈັດຢູ່ໃນປະເພດແຮງງານທີ່ປະກອບອາຊີບອິດສະຫຼະ (ຈ້າງຕົນເອງ) ຫຼື ແຮງງານໃນຄອບຄົວທີ່ບໍ່ມີຄ່າຈ້າງ. ຢູ່ໃນເຂດຕົວເມືອງກໍ່ຄືກັນ, ປະຊາກອນສ່ວນໃຫຍ່ກໍ່ຍັງເຫັນວ່າເປັນແຮງງານຈ້າງຕົນເອງ. ສ່ວນໃນເຂດຊົນນະບົດນັ້ນ, ລະດູການປູກຝັງ ເປັນສິ່ງກຳນົດເວລາເຮັດວຽກຂອງປະຊາຊົນ. ປະຊາຊົນໃນເຂດຊົນນະບົດ ຍັງໄດ້ໃຫ້ຄຳນິຍາມຂຶ້ນມາໃໝ່ກ່ຽວກັບຍຸດທະສາດການດຳລົງຊີວິດຂອງຕົນຈາກລະດູການໜຶ່ງໄປສູ່ອີກລະດູການອື່ນເຊັ່ນ: ຖ້າວ່າເກີດມີໄພແຫ້ງແລ້ງ ການດຳລົງຊີວິດຂອງເຂົາເຈົ້າຈະປ່ຽນໄປອາໄສການເກັບເຄື່ອງປ່າຂອງດົງແທນການປູກເຂົ້າ. ສະນັ້ນ, ເຈົ້າໜ້າທີ່ທາງດ້ານສະຖິຕິ ຈຶ່ງໄດ້ກຳນົດວ່າ ບຸກຄົນຜູ້ໜຶ່ງຈະຖືກຈັດຢູ່ໃນປະເພດແຮງງານ ຫຼື ບໍ່ນັ້ນ ແມ່ນອີງຕາມກິດຈະກຳຫຼັກຂອງເຂົາເຈົ້າວ່າເປັນກິດຈະກຳຫຍັງໃນໄລຍະ 12 ເດືອນຜ່ານມາ ຊຶ່ງເປັນໄລຍະກ່ອນການສຳພາດເພື່ອເກັບກຳຂໍ້ມູນ.

ກິດຈະກຳຫຼັກຂອງບຸກຄົນຜູ້ໜຶ່ງສາມາດຈັດປະເພດໄດ້ຄື: "ເຮັດວຽກ", "ຫວ່າງງານ", "ເປັນນັກສຶກສາ", "ເຮັດວຽກເຮືອນການຊານ", ຫຼື "ໜຸ່ມໂພດ, ແກ່ໂພດ ຫຼື ສຸຂະພາບບໍ່ແຂງແຮງພໍທີ່ຈະບໍ່ສາມາດເຮັດວຽກໄດ້". ໃນນັ້ນ, ສອງປະເພດທຳອິດແມ່ນປະເພດທີ່ປະກອບສ່ວນທາງເສດຖະກິດຢ່າງຕັ້ງໜ້າ. ສ່ວນສາມປະເພດຖັດມາແມ່ນປະເພດທີ່ບໍ່ໄດ້ປະກອບສ່ວນທາງເສດຖະກິດຢ່າງຕັ້ງໜ້າ. ມີຄວາມເປັນໄປໄດ້ ທີ່ຈະສະເໜີແນະວິທີການໃໝ່ໃນການການຈັດປະເພດແຮງງານແບບກວ້າງໆ ເພື່ອສະແດງໃຫ້ເຫັນເຖິງສະພາບການດຳລົງຊີວິດອັນແທ້ຈິງຂອງປະຊາຊົນ. ຕົວຢ່າງ: ຕົວເລກທາງສະຖິຕິທາງການໃນບາງປະເທດໄດ້ຈັດແບ່ງບຸກຄົນເຂົ້າໃນສອງ ຫຼື ຫຼາຍກິດຈະກຳໃນໄລຍະເວລາດຽວກັນ.

## ເອກະສານຊ້ອນທ້າຍ 3.1:

# ຕົວປ່ງນສຳຄັນລຳລັບການສຶກສາວິໄຈດ້ານແຮງງານ

**ຕາຕະລາງ A3.1: ການແຈກຢາຍກຳລັງແຮງງານຕາມຂະແໜງການ, ປີ 2005-2006**

| | ຂະແໜງການ | ແຮງງານຄິດ ເປັນອັດຕາສ່ວນ(%) |
|---|---|---|
| 1 | ການຜະລິດກະສິກຳແບບຄອບຄົວ | 78.5 |
| 2 | ການປູກຕົ້ນໄມ້ເພື່ອການຄ້າ ຫຼື ກະສິກຳເສດຖະກິດອື່ນໆ | 0.75 |
| 3 | ບໍ່ແຮ່ ແລະ ຂະແໜງອື່ນໆທີ່ກ່ຽວຂ້ອງ | 0.28 |
| 4 | ຂະແໜງການຜະລິດ | |
| | *ຜະລິດຕະພັນອາຫານ* | *0.97* |
| | *ເຄື່ອງດື່ມ, ຢາສູບ ແລະ ຜະລິດຕະພັນເຄື່ອງໜັງ* | *0.22* |
| | *ຕັດຫຍິບ ແລະ ຕໍ່າແຜ່ນແພ* | *1.04* |
| | *ໄມ້ ແລະ ເຄື່ອງປະດັບພາຍໃນເຮືອນ* | *0.77* |
| | *ຈັດພິມ, ສື່ຕ່າງໆ* | *0.10* |
| | *ເຄມີ ແລະ ອື່ນໆ* | *0.11* |
| | *ໂລຫະ ແລະ ປະເພດທີ່ບໍ່ແມ່ນໂລຫະໃນຂະແໜງບໍ່ແຮ່* | *0.43* |
| | *ເຄື່ອງເອເລັກໂຕຣນິກ ແລະ ປະເພດກົນຈັກ* | *0.05* |
| | *ຜະລິດຕະພັນປະເພດລົດ ແລະ ການຂົນສົ່ງອື່ນໆ* | *0.07* |
| | *ສ້ອມແປງ ແລະ ການຜະລິດອື່ນໆ* | *0.09* |
| 5 | ໄຟຟ້າ, ນ້ຳ ແລະ ອື່ນໆ. | 0.24 |
| 6 | ກໍ່ສ້າງ | 0.45 |
| 7 | ການຄ້າຂາຍຍົກ ແລະ ຂາຍຍ່ອຍ | 4.92 |
| 8 | ບໍລິການດ້ານເສດຖະກິດ (ລວມມີ: ຄົມມະນາຄົມ, ຂົນສົ່ງ ແລະ ການເງິນ) | 1.74 |
| 9 | ການສຶກສາ | 1.74 |
| 10 | ສຸຂະພາບ | 0.39 |
| 11 | ການບັນເທີງ, ສິລະປະ ແລະ ອື່ນໆ | 1.01 |
| 12 | ການບໍລິການຂອງລັດ | 6.13 |
| | **ລວມ** | **100.00** |

***ແຫຼ່ງຂໍ້ມູນ:*** *ການສຳຫຼວດເສດຖະກິດທົ່ວປະເທດ 2006 ແລະ ການສຳຫຼວດພົນລະເມືອງ ແລະ ທີ່ຢູ່ອາໄສ 2005 (GOL (2007c) ແລະ GOL (2006a)).*

## ເອກະສານຊ້ອນທ້າຍ 3.2:

# ການສົມທຽບຕົວເລກ, ການສຳຫຼວດພົນລະເມືອງ ແລະ ທີ່ຢູ່ອາໄສ ແລະ ການສຳຫຼວດເສດຖະກິດທົ່ວປະເທດ

ຂໍ້ມູນການສຳຫຼວດພົນລະເມືອງ ແລະ ທີ່ຢູ່ອາໄສສຳລັບປີ 2005 ບໍ່ໄດ້ຈັດແບ່ງປະເພດແຮງງານໃນແຕ່ລະຂະແໜງການເຂົ້າໃນຕາຕະລາງເທື່ອ ເຊັ່ນ: ແຮງງານທີ່ຈັດຢູ່ໃນຂະແໜງກະສິກຳ ແລະ ນອກຂະແໜງກະສິກຳ. ເຖິງຢ່າງໃດກໍ່ຕາມ, ການສຳຫຼວດເສດຖະກິດທົ່ວປະເທດໃນປີ 2006 (GOL (2007c)) ໄດ້ເກັບກຳຂໍ້ມູນ ກ່ຽວກັບຫົວໜ່ວຍທຸລະກິດທີ່ຢູ່ນອກຂະແໜງກະສິກຳໃນລາວ ຊຶ່ງໄດ້ຈັດແບ່ງອອກເປັນ 4 ຕົວເລກໃນລະຫັດສາລະບານ. ໃນນັ້ນ, ແຮງງານປະເພດຕ່າງໆໃນອຸດສາຫະກຳດັ່ງກ່າວລວມມີ: ແຮງງານທີ່ປະກອບອາຊີບອິດສະຫຼະ, ແຮງງານຮັບຈ້າງທົ່ວໄປ ແລະ ແຮງງານຄົວເຮືອນທີ່ບໍ່ໄດ້ຮັບເງິນຄ່າຈ້າງ. ການສຳຫຼວດເສດຖະກິດທົ່ວປະເທດປີ 2006 ໄດ້ເກັບກຳຂໍ້ມູນກ່ຽວກັບ ຫົວໜ່ວຍທຸລະກິດທີ່ໄລ່ລຽງເສດຖະກິດ ແລະ ຫົວໜ່ວຍທຸລະກິດທີ່ບໍ່ສ້າງຜົນກຳໄລ/ອົງການຈັດຕັ້ງບໍ່ສັງກັດລັດຖະບານ (NGO); ການສຳຫຼວດດັ່ງກ່າວ ບໍ່ໄດ້ເກັບກຳຂໍ້ມູນກ່ຽວກັບ ພະນັກງານລັດຖະກອນ ໃນກະຊວງຕ່າງໆ, ຕຳຫຼວດ, ທະຫານ ແລະ ອື່ນໆ. ການສຳຫຼວດສະແດງໃຫ້ ເຫັນວ່າ ຕົວເລກແຮງງານໃນຫົວໜ່ວຍທຸລະກິດ ທີ່ໄລ່ລຽງເສດຖະກິດຢູ່ນອກຂະແໜງກະສິກຳ ທັງ ໝົດມີ 345,724 ຄົນ ແລະ ແຮງງານໃນຂະແໜງ ທຸລະກິດທີ່ບໍ່ສ້າງຜົນກຳໄລ/ອົງການຈັດຕັ້ງບໍ່ສັງກັດລັດຖະບານ ມີທັງໝົດ 76,979 ຄົນ. ສະນັ້ນ, ຈຳນວນແຮງງານທັງໝົດ ທີ່ຢູ່ໃນຫົວໜ່ວຍທຸລະກິດນອກຂະແໜງກະສິກຳ-ຫົວໜ່ວຍທຸລະກິດທີ່ໄລ່ລຽງເສດຖະກິດ ບວກກັບ ຫົວໜ່ວຍທຸລະກິດທີ່ບໍ່ສ້າງຜົນກຳໄລ/ອົງການຈັດຕັ້ງບໍ່ສັງກັດແມ່ນລັດຖະບານ ມີ 422,703 ຄົນ. ຜົນການສຳຫຼວດພົນລະເມືອງ ແລະ ທີ່ຢູ່ອາໄສ ໃນປີ 2005 ແມ່ນລວມ ມີຂໍ້ມູນຕົວເລກພະນັກງານລັດຖະກອນເຂົ້ານຳ ຊຶ່ງມີພະນັກງານລັດຖະກອນທັງໝົດ ປະມານ 168,388 ຄົນ ໂດຍບໍ່ຮວມພະນັກງານທີ່ເຮັດວຽກຢູ່ລັດວິສາຫະກິດ. ຕົວເລກພະນັກງານລັດ ແລະ ແຮງງານ ໃນຫົວໜ່ວຍທຸລະກິດນອກກະສິກຳ ມີທັງໝົດ 591,091 ຄົນ. ໃນນັ້ນ, ມີແມ່ຍິງປະມານ 42.6%. ສຳລັບຕົວ ເລກແຮງງານທີ່ຢູ່ນອກຂະແໜງກະສິກຳ ຈາກຜົນການສຳຫຼວດພົນລະເມືອງ ແລະ ທີ່ຢູ່ອາໄສ ປີ 2005 ມີຈຳນວນ 588,862 ຄົນ ຊຶ່ງໃນນັ້ນ ມີເພດຍິງ ປະມານ 43.6%. ຕົວເລກຂອງສອງການສຳຫຼວດ ທີ່ໄດ້ກ່າວມາຂ້າງເທິງນັ້ນມີຄວາມແຕກຕ່າງກັນໜ້ອຍກວ່າໜຶ່ງເປີເຊັນ. ດັ່ງນັ້ນ, ຄວາມໃກ້ຄຽງກັນຂອງຕົວເລກເຫຼົ່ານີ້ ບອກໃຫ້ຮູ້ເຖິງຄວາມເປັນໄປໄດ້ໃນການນຳເອົາຕົວເລກດັ່ງກ່າວມາທຽບຄຽງກັນ ແລະ ສາມາດປຽບທຽບກັນໄດ້.

# ບົດທີ 4:

## ປັບປຸງການສ້າງວຽກເຮັດງານທຳ ແລະ ການດຳລົງຊີວິດຂອງແມ່ຍິງ ແລະ ເດັກນ້ອຍຢູ່ເຂດຊົນນະບົດ



ບົດທີ 4:

# ປັບປຸງການສ້າງວຽກເຮັດງານທຳ ແລະ ການດຳລົງຊີວິດຂອງແມ່ຍິງ ແລະ ເດັກນ້ອຍຢູ່ເຂດຊົນນະບົດ

ຄົນແມ່ນໃຈກາງ ທີ່ສາມາດສ່ອງແສງໃຫ້ເຫັນສາຍສຳພັນລະຫວ່າງເສດຖະກິດກັບສັງຄົມ. ດັ່ງນັ້ນ, ຜົນຈາກການປະພຶດ ຫຼື ການເຄື່ອນໄຫວຂອງຄົນຜູ້ໜຶ່ງຈະບໍ່ຮັບໃຊ້ສະເພາະແຕ່ຜົນປະໂຫຍດສ່ວນຕົວທາງດ້ານຊັບສິນ ແຕ່ຫາກຍັງຊ່ວຍປົກປ້ອງຊັບສິນທາງສັງຄົມຂອງບຸກຄົນເຊັ່ນກັນ. ວັດຖຸຈະມີຄຸນຄ່າໄດ້ກໍ່ຕໍ່ເມື່ອວ່າມີການນຳໃຊ້ຢ່າງຖືກຕ້ອງ ແລະ ມີເປົ້າໝາຍ. ທຸກໆຂັ້ນຕອນຂອງການຜະລິດ ແລະ ການເຄື່ອນໄຫວ ແມ່ນເພື່ອຕອບສະໜອງຄວາມຮຽກຮ້ອງຜົນປະໂຫຍດທາງສັງຄົມ, ແຕ່ກໍ່ຕ້ອງເຂົ້າໃຈວ່າຄວາມຮຽກຮ້ອງ ແລະ ຜົນປະໂຫຍດດັ່ງກ່າວມີຄວາມແຕກຕ່າງກັນຊຶ່ງຂຶ້ນກັບຂະໜາດຂອງສັງຄົມ ເຊັ່ນ: ຜົນປະໂຫຍດຈາກການລ່າເນື້ອ ແລະ ຫາປາໃນສັງຄົມຂອງຊຸມຊົນໃນປະຈຸບັນກໍ່ມີຄວາມແຕກຕ່າງຈາກ ສັງຄົມສັກດີນາທີ່ມີການກົດຂີ່ຂູດຮີດ. ເຖິງຢ່າງໃດກໍ່ຕາມ, ສິ່ງທີ່ຄືກັນຂອງສັງຄົມທັງສອງນັ້ນ ບໍ່ວ່າຈະເປັນກໍລະນີໃດ, ລະບົບເສດຖະກິດຈະເຄື່ອນໄຫວບົນພື້ນຖານປັດໄຈຊຸກຍູ້ທີ່ບໍ່ແມ່ນເສດຖະກິດ.

**ຄັດມາຈາກບົດ 'ອົງການຈັດຕັ້ງຊາວນາຊົນນະບົດ',**
Alexander Chayanev, **ນັກເສດຖະສາດລັດເຊຍ, 1889–1937**

## ສະພາບລວມ

ການວິໄຈໃນບົດລາຍງານສະບັບນີ້ ແມ່ນອີງໃສ່ການສຳຫຼວດຕົວແທນໃນ 20 ບ້ານ.

'ແຮງງານຮັບຈ້າງທົ່ວໄປ ທີ່ເຮັດວຽກໄລຍະຍາວ' ໄດ້ເກີດຂຶ້ນ ແລະ ກາຍມາເປັນກຸ່ມແຮງງານເຮັດວຽກກຸ່ມໃໝ່ຢູ່ເຂດຊົນນະບົດ. ອີງໃສ່ປະສົບການຈາກຂົງເຂດຕ່າງໆ ຢູ່ອາຊີເຫັນວ່າແຮງງານເຫຼົ່ານີ້ ຖືເປັນຈຸດດ້ອຍທີ່ສຸດ ທາງດ້ານເສດຖະກິດຂອງສັງຄົມ. ແຮງງານເຫຼົ່ານີ້ ມີຫຼາຍຢູ່ເຂດຊົນນະບົດຂອງລາວເຮົາ ໂດຍສະເພາະຢູ່ໃນບ້ານຍົກຍ້າຍຈັດສັນ ແລະ ຢູ່ໃນກຸ່ມຊົນເຜົ່າໝວດພາສາຈີນ-ຕິເບດ ແລະ ມອນ-ຂະແມ. ການປ່ຽນວຽກຂອງຜູ້ອອກແຮງງານແມ່ນ 1.7 - 1.9 ຫຼື ເກືອບເທົ່າ 2 ເທື່ອໂດຍສະເລ່ຍຕໍ່ອາທິດ.

ການເລືອກອາຊີບກ່ຽວພັນໂດຍກົງກັບບົດບາດຍິງຊາຍ: ແຮງງານເພດຍິງເຮັດວຽກໃນຂະບວນການຜະລິດໃນຄົວເຮືອນທີ່ບໍ່ໄດ້ຮັບຄ່າຈ້າງ ຊຶ່ງຈັດຢູ່ໃນກຸ່ມວຽກທີ່ມີລາຍຮັບຕ່ຳ ມີຫຼາຍກວ່າແຮງງານເພດຊາຍ.

ແຮງງານຊົນນະບົດເຮັດຫຼາຍອາຊີບເກືອບວ່າຈະຕໍ່ເນື່ອງກັນໃນຮອບປີ. ໃນລະດູແລ້ງ, ພວກເຂົາເຈົ້າຈະຜະລິດເພື່ອກຸ້ມຕົນເອງ ແລະ ອອກຈາກວຽກປະຈຳ (ແມ່ຍິງຈະອອກຈາກວຽກຫຼາຍກວ່າຜູ້ຊາຍ) ຊຶ່ງເປັນສັນຍານໃຫ້ເຫັນວ່າ ມີການເຮັດວຽກບໍ່ເຕັມເວລາມາດຕະຖານ (ການຫວ່າງງານເຊື່ອງຊ້ອນ) ຢູ່. ແຮງງານມັກຈະປ່ຽນ ວຽກຫຼາຍເທື່ອ ໂດຍສະເລ່ຍແລ້ວ ປະມານ 1.7-1.9 ເທື່ອຕໍ່ອາທິດ. ອັນນີ້ກໍ່ແມ່ນສິ່ງສະແດງໃຫ້ເຫັນວ່າ ເຂົາເຈົ້າບໍ່ມີຄວາມໝັ້ນຄົງໃນວຽກໃດໜຶ່ງ. ການຜະລິດກະສິກຳໃຫ້ຜົນຕອບແທນບໍ່ເທົ່າເຄິ່ງໜຶ່ງຂອງລາຍຮັບທັງໝົດຂອງຄົວເຮືອນຊົນນະບົດ. ການເຮັດວຽກນອກລະດູການກະສິກຳ ແລະ ວຽກທີ່ບໍ່ແມ່ນກະສິກຳ ກຳລັງມີຄວາມສຳຄັນຫຼາຍຂຶ້ນ (ລວມເຖິງວຽກຮັບຈ້າງ). ການຫວ່າງງານຢູ່ຊົນນະບົດຍັງສູງ: ເຫັນໄດ້ຈາກຜູ້ຫວ່າງງານແບບບໍ່ສະໝັກໃຈມີສູງເຖິງ 12-15% ຂອງຈຳນວນນີ້ເຮັດວຽກທັງໝົດ. ແຮງງານທຸກຍາກ, ໄວໜຸ່ມ, ຊາວກະສິກອນ, ແຮງງານຊົນນະບົດ ແລະ ແຮງງານທີ່ມາຈາກບ້ານຍົກຍ້າຍ ຫຼື ຈັດສັນຍິ່ງມີອັດຕາການຫວ່າງງານສູງກວ່າອີກ. ສາເຫດຕົ້ນຕໍຂອງການຫວ່າງງານດັ່ງກ່າວແມ່ນຍ້ອນຄວາມຕ້ອງການເງິນເພີ່ມຂຶ້ນຕາມຂະບວນການຫັນເປັນການຄ້າ, ການຂາດແຄນທີ່ດິນກະສິກຳ, ຄວາມກົດດັນຈາກການເພີ່ມຂຶ້ນຂອງຈຳນວນປະຊາກອນ ແລະ ສິ່ງທ້າທາຍຕ່າງໆ ຈາກຂະບວນການຍົກຍ້າຍບ້ານ ແລະ ການຈັດສັນກຸ່ມບ້ານໃໝ່. ໃນປະຈຸບັນນີ້ ມີການຂາດແຄນທີ່ດິນ ແລະ ປ່າໄມ້ຫຼາຍຂຶ້ນ. ນອກຈາກນີ້, ກໍ່ຍັງມີສະພາບທີ່ປະຊາຊົນບໍ່ມີທີ່ດິນ: ປະມານ 15% ຂອງຄົວເຮືອນທັງໝົດຢູ່ຊົນນະບົດ, ຊຶ່ງຜູ້ທີ່ທຸກຍາກທີ່ສຸດ ກໍ່ແມ່ນຊາວກະສິກອນທີ່ບໍ່ມີດິນເປັນຂອງຕົນເອງດັ່ງກ່າວ.

ລາຍຮັບສະເລ່ຍຕໍ່ຫົວຄົນຢູ່ບ້ານທີ່ຖືກສຳຫຼວດ, ເຫັນວ່າມີໜ້ອຍກວ່າເຄິ່ງໜຶ່ງຂອງລາຍຮັບສະເລ່ຍຕໍ່ຫົວຄົນໃນລະດັບຊາດ. ຄົວເຮືອນຢູ່ໃນກຸ່ມຊົນເຜົ່າທີ່ບໍ່ແມ່ນກຸ່ມພາສາລາວ-ໄຕ ແລະ ຄົວເຮືອນໃນບ້ານຈັດກຸ່ມບ້ານໃໝ່, ບ້ານຍົກຍ້າຍ ແລະ ຈັດສັນ ແລະ ບ້ານຫັນປ່ຽນອາຊີບມີຄວາມທຸກຍາກຫຼາຍກວ່າຄົວເຮືອນໃນກຸ່ມບ້ານອື່ນໆ. ສາເຫດທີ່ທຸກຍາກກວ່າກໍ່ແມ່ນຍ້ອນຂາດແຄນທີ່ດິນ, ການເຂົ້າເຖິງປ່າໄມ້ໄດ້ໜ້ອຍລົງ, ອັດ ຕາສ່ວນຂຶ້ນກັບເສດຖະກິດສູງ, ຕະຫຼາດສິນຄ້າບໍ່ອຳນວຍ ແລະ ລະດັບທຶນມະນຸດຕ່ຳ ('ຄວາມທຸກຍາກດ້ານທຶນມະນຸດ' ແມ່ນ 36% - ສຳລັບກຸ່ມຊົນເຜົ່າທີ່ເວົ້າ ພາສາຈີນ-ຕິເບດ ໃນບ້ານທີ່ຖືກສຳຫຼວດລະດັບດັ່ງກ່າວແມ່ນ 93%).

ປະລິມານ ແລະ ຄຸນນະພາບຂອງແຮງງານແມ່ນປັດໄຈສຳຄັນທີ່ສຸດ. ການເຂົ້າເຖິງທີ່ດິນ, ທຶນມະນຸດ (ການເຂົ້າເຖິງການສຶກສາເພື່ອພັດທະນາຄວາມຮູ້ ແລະ ຄວາມສາມາດ), ນ້ຳສະອາດ, ການຈ້າງງານຢູ່ຊົນນະບົດເປັນສິ່ງທີ່ຕ້ອງເອົາໃຈໃສ່ທັງໝົດ.

**ຄຳຖາມສະເພາະເພື່ອໃຫ້ໄດ້ຄຳຕອບຕາມທີ່ຕ້ອງການມີດັ່ງລຸ່ມນີ້:**

1. ແບບແຜນວິທີການເຮັດວຽກ ແລະ ວຽກເຮັດງານທຳ ຢູ່ຊົນນະບົດເປັນຄືແນວໃດ?
2. ມີການຫວ່າງງານເກີດຂຶ້ນບໍ່? ຖ້າມີ, ໃນຂອບເຂດກວ້າງຂວາງປານໃດ?
3. ປະຊາຊົນມີລາຍຮັບຈາກແຫຼ່ງໃດແດ່ ແລະ ມີການກະຈາຍລາຍຮັບດັ່ງກ່າວຄືແນວໃດ? ສະພາບການຮັບປະກັນທາງດ້ານສະບຽງອາຫານ ແລະ ການເຂົ້າເຖິງຊັບພະຍາກອນສ່ວນຣວມຂອງບ້ານມີຄືແນວໃດ? ແລະ
4. ລັກສະນະຂອງການແຈກຢາຍທີ່ດິນກະສິກຳມີຄືແນວໃດ? ສະພາບຄວາມບໍ່ເທົ່າທຽມກັນ, ການທີ່ບໍ່ມີດິນເປັນຂອງຕົນເອງ ແລະ ບໍ່ມີທຶນມະນຸດມີຄືແນວໃດ?

## ຈຸດປະສົງ

ຄົນລາວສ່ວນໃຫຍ່ອາໄສຢູ່ຕາມບ້ານຊົນນະບົດ ມີລັກສະນະສະເພາະທາງດ້ານການດຳລົງຊີວິດທີ່ອີງໃສ່ການຜະລິດກະສິກຳ, ການນຳໃຊ້ທີ່ດິນ, ລະບົບການເຮັດນາ, ວິຖີຊີວິດ, ຄຸນຄ່າທາງດ້ານມະນຸດ ແລະ ສັງຄົມ, ພາສາປາກເວົ້າ ແລະ ວັດທະນະທຳ. ໃນປະຈຸບັນ ປະຊາຊົນເຂດຊົນນະບົດດັ່ງກ່າວ ພວມປະເຊີນກັບການຂ້າມຜ່ານ ຊຶ່ງສ່ວນໜຶ່ງກໍ່ໄດ້ຮັບອິດທິພົນຈາກແຮງກົດດັນພາຍໃນ (ການເຕີບໂຕຂອງພົນລະເມືອງ) ແລະ ອີກສ່ວນ ໜຶ່ງກໍ່ຖືກແຮງກົດດັນຈາກອິດທິພົນພາຍນອກ (ການເຕີບໂຕຂຶ້ນຂອງຕະຫຼາດ ແລະ ຜົນສະທ້ອນຈາກສື່ໂຄສະນາຕ່າງໆ). ການຂ້າມຜ່ານດັ່ງກ່າວມີຄວາມແຕກຕ່າງກັນຫຼາຍໃນແຕ່ລະເຂດ. ຢູ່ບາງເຂດປະຊາຊົນສາມາດປັບຕົວໄດ້ໄວກວ່າ ແລະ ໄດ້ຮັບຜົນປະໂຫຍດຈາກການປ່ຽນແປງທີ່ເກີດຂຶ້ນ. ແຕ່ວ່າປະຊາຊົນໃນບາງເຂດພັດມີບົດບາດ ແລະ ຄວາມເຂັ້ມແຂງໜ້ອຍລົງ ຊຶ່ງໄດ້ເຮັດໃຫ້ຊຸມຊົນດັ່ງກ່າວ ມີຂໍ້ຈຳກັດໃນການເປີດຕົວສູ່ໂລກພາຍນອກຫຼາຍຂຶ້ນ. ບົດທີ 2 ແລະ 3 ຈະໃຫ້ຂໍ້ມູນ ແລະ ຫຼັກຖານ ເພື່ອຢັ້ງຢືນວ່າອັດຕາການຂະຫຍາຍໂຕທາງດ້ານເສດຖະກິດຕາມປະສົບການທີ່ຜ່ານມາ ບໍ່ໄດ້ສ້າງຜົນປະໂຫຍດ ໃຫ້ແກ່ປະຊາຊົນຜູ້ທຸກຍາກໄດ້ທົ່ວເຖິງກັນໝົດ. ເຖິງຢ່າງໃດກໍ່ຕາມ, ປະຊາຊົນໝົດທຸກຄົນມີສິດທີ່ຈະດຳລົງຊີວິດ ຢ່າງສະຫງ່າຜ່າເຜີຍ ແລະ ມີກຽດເທົ່າທຽມກັນ. ສຸດທ້າຍ, ເຂົາເຈົ້າກໍ່ຕ້ອງເປັນສ່ວນໜຶ່ງ ແລະ ເປັນບຸກຄົນສຳຄັນໃນການປ່ຽນແປງທາງດ້ານເສດຖະກິດ ແລະ ສັງຄົມທີ່ໃຫຍ່ຂຶ້ນກວ່າເກົ່າຂອງລາວເຮົາ. ໃນປະຈຸບັນນີ້, ອີງໃສ່ຂໍ້ມູນກ່ຽວກັບການດຳລົງຊີວິດຂອງຊາວຊົນນະບົດ ລວມທັງຊາວກະສິກອນ ແລະ ຂໍ້ມູນກ່ຽວກັບ ຊັບພະຍາກອນທຳມະຊາດ, ເຫັນວ່າມີຊ່ອງຫວ່າງຫຼາຍດ້ານເກີດຂຶ້ນ. ດັ່ງນັ້ນ, ຈຶ່ງໄດ້ມີການຄົ້ນຄວ້າສຳຫຼວດຕົວແທນໃນ 20 ບ້ານທີ່ຖືກເລືອກ ເພື່ອສ້າງຄວາມເຂົ້າໃຈ ກ່ຽວກັບລັກສະນະວຽກເຮັດງານທຳ, ວິຖີການດຳລົງຊີວິດ, ປັດໄຈບົ່ມຊ້ອນທີ່ມີຢູ່ ແລະ ລະດັບຄວາມສາມາດຂອງປະຊາຊົນຢູ່ຊົນນະບົດ[57].

## ການມີວຽກເຮັດງານທຳ ແລະ ການຫວ່າງງານ

### ຜູ້ອອກແຮງງານເຮັດຫຍັງ?

ລັກສະນະທົ່ວໄປຂອງປະຊາຊົນຢູ່ໃນກຸ່ມທີ່ຖືກສຳພາດ ບໍ່ວ່າຈະແມ່ນໃນດ້ານອັດຕາການມີສ່ວນຮ່ວມໃນການເຮັດວຽກງານ, ການມີສ່ວນຮ່ວມຂອງແມ່ຍິງໃນກຳລັງແຮງງານ, ແຮງງານເດັກ ແລະ ການກະຈາຍລະດັບອາຍຸຂອງແຮງງານ ແລະ ປະຊາຊົນຄ້າຍຄືກັນກັບລັກສະນະຂອງປະຊາຊົນທົ່ວໄປ ທີ່ເຫັນໃນຂໍ້ມູນການສຳຫຼວດພົນລະເມືອງ. ຖ້າເປັນແນວນັ້ນ, ກໍ່ຖືໄດ້ວ່າຜົນການຄົ້ນຄວ້າດັ່ງກ່າວເປັນທີ່ສາມາດຮັບເອົາໄດ້.

### ການເຮັດວຽກຕາມສະພາບປົກກະຕິ

ການວັດແທກການເຮັດວຽກຕາມສະພາບປົກກະຕິ ແມ່ນກຳນົດໄດ້ຈາກການທີ່ບຸກຄົນໆນັ້ນ ໃຊ້ເວລາເກືອບທັງໝົດເຮັດກິດຈະກຳໃດໜຶ່ງໃນໄລຍະຍາວ ຫຼື ປະມານ 6 ເດືອນ. ຈະເຫັນໄດ້ວ່າໃນກຸ່ມບ້ານ

**ຮູບສະແດງ 4.1: ອັດຕາສ່ວນແຮງງານ ແຈກຢາຍຕາມສະພາບການເຮັດວຽກປົກກະຕິ, ໃນແຕ່ລະປະເພດແຮງງານ**




***ແຫຼ່ງຂໍ້ມູນ:*** *ການສຳຫຼວດແຮງງານຊົນນະບົດຂອງ NHDR ສົກປີ 2007-2008, ກົມສະຖິຕິ.*

57 ເບິ່ງເອກະສານຊ້ອນທ້າຍ 4.1 ສຳລັບລາຍລະອຽດຂອງຕົວແທນ ແລະ ຄຳນິຍາມ. ກຸ່ມຕົວແທນມີທັງໝົດ 10,791 ຄົນ ທີ່ຖືກຈັດເປັນກຸ່ມເຂົ້າໃນ 2,043 ຄົວເຮືອນໃນ 20 ບ້ານ. ໃນຈຳນວນເຫຼົ່ານີ້, ມີຜູ້ຊາຍ 5,358 ຄົນ ແລະ ແມ່ຍິງ 5,433 ຄົນ. ມີຈຳນວນແຮງງານທັງໝົດ 5,430 ຄົນ: ໃນນັ້ນມີຜູ້ຊາຍ 2,735 ຄົນ ແລະ ແມ່ຍິງ 2,695 ຄົນ.

**ຮູບສະແດງ 4.2: ອັດຕາສ່ວນແຮງງານຮັບຈ້າງທົ່ວໄປ ແຈກຢາຍຕາມສະພາບການເຮັດວຽກປົກກະຕິໃນແຕ່ລະປະເພດຂອງບ້ານ**




***ແຫຼ່ງຂໍ້ມູນ:*** *ການສຳຫຼວດແຮງງານຊົນນະບົດຂອງ NHDR ສົກປີ 2007-2008, ກົມສະຖິຕິ.*

ຕົວແທນ ມີແຮງງານປະກອບອາຊີບອິດສະຫຼະປະມານ 64.9% ແລະ ແຮງງານໃນຄົວເຮືອນທີ່ບໍ່ໄດ້ຮັບຄ່າຈ້າງ 25.3% (ຮູບສະແດງ 4.1). ທັງສອງກຸ່ມວຽກດັ່ງກ່າວ ກວມເອົາຫຼາຍກວ່າ 90% ຂອງແຮງງານທັງໝົດ. ໃນກຸ່ມແຮງງານທີ່ປະກອບອາຊີບອິດສະຫຼະ, ແຮງງານຜູ້ຊາຍມີອັດຕາສ່ວນຫຼາຍກວ່າແຮງງານແມ່ຍິງ, ແຕ່ໃນກຸ່ມແຮງງານໃນຄົວເຮືອນທີ່ບໍ່ໄດ້ຮັບຄ່າຈ້າງມີອັດຕາສ່ວນແຮງງານແມ່ຍິງຫຼາຍກວ່າ. ອັດຕາສ່ວນດັ່ງກ່າວ ສະທ້ອນໃຫ້ເຫັນວ່າ ຢູ່ບ່ອນເຮັດວຽກແຮງງານແມ່ຍິງມີສະຖານະພາບຕ່ຳກວ່າ. ນອກນັ້ນ, ກໍ່ຍັງສະແດງໃຫ້ເຫັນວ່າ ແຮງງານແມ່ຍິງມີຄວາມເຂັ້ມແຂງຕ່ຳກວ່າຜູ້ຊາຍ.

ຈາກຮູບສະແດງ 4.1 ຈະເຫັນວ່າ ມີການກຳເນີດຂຶ້ນຂອງ 'ແຮງງານຮັບຈ້າງທົ່ວໄປ' ທີ່ເປັນກຸ່ມເຮັດວຽກຕາມສະພາບປົກກະຕິກຸ່ມໃໝ່ຢູ່ໃນຊົນນະບົດຂອງລາວ ຊຶ່ງມີປະມານ 5.4% ຂອງກຳລັງແຮງງານທັງໝົດ, ໃນນັ້ນມີແຮງງານເພດຊາຍ 7.9% ແລະ ແຮງງານແມ່ຍິງ 2.9%. ຜ່ານມາຈົນຮອດປະຈຸບັນ ກໍ່ຍັງບໍ່ທັນມີການສຳຫຼວດພົນລະເມືອງ ຫຼື ການສຳຫຼວດອື່ນໃດທີ່ພົບເຫັນວ່າ ມີແຮງງານເຮັດວຽກຮັບຄ່າຈ້າງທົ່ວໄປເກີດຂຶ້ນມາຍາວນານແລ້ວ[58]. ດັ່ງນັ້ນ, ຜົນການຄົ້ນຄວ້າຄັ້ງນີ້ຈຶ່ງມີຄວາມສຳຄັນເນື່ອງຈາກວ່າແຮງງານຮັບຈ້າງທົ່ວໄປດັ່ງກ່າວ ມີອາຊີບບໍ່ໝັ້ນຄົງ ແລະ ມີກຽດຊື່ສຽງໜ້ອຍໃນສັງຄົມ. ປະສົບການຈາກຂົງເຂດອື່ນໆໃນອາຊີ ຊີ້ໃຫ້ເຫັນວ່າ ແຮງງານຮັບຈ້າງທົ່ວໄປ ເປັນກຸ່ມທີ່ມີຄວາມສ່ຽງທາງດ້ານເສດຖະກິດທີ່ສຸດຢູ່ໃນສັງຄົມຊົນນະບົດ. ທັງນີ້ກໍ່ຍ້ອນວ່າແຮງງານເຫຼົ່ານີ້ມີທີ່ດິນໜ້ອຍ ຫຼື ບໍ່ມີທີ່ດິນກະສິກຳເລີຍ, ບໍ່ມີທັກສະສີມືດ້ານອື່ນນອກຈາກການຜະລິດກະສິກຳພໍແຕ່ກຸ້ມກິນ, ວຽກງານໃນແຕ່ລະວັນ ແລະ ອັດຕາຄ່າຈ້າງບໍ່ມີຄວາມແນ່ນອນ. ການທີ່ມີຈຳນວນແຮງງານເຫຼົ່ານີ້ເພີ່ມຫຼາຍຂຶ້ນ ເຮັດໃຫ້ເກີດແຮງກົດດັນບໍ່ດີຕໍ່ຄ່າແຮງງານ. ດັ່ງນັ້ນ, ການເຮັດວຽກບໍ່ມີຄວາມໝັ້ນຄົງ ແລະ ຄ່າຈ້າງຕ່ຳເຮັດໃຫ້ແຮງງານເຫຼົ່ານີ້ຍິ່ງທຸກຍາກລົງ[59].

ສະພາບຂອງແຮງງານຮັບຈ້າງທົ່ວປມີຄວາມແຕກຕ່າງກັນໄປຕາມປະເພດຂອງບ້ານ (ຮູບສະແດງ 4.2)[60]. ສະພາບດັ່ງກ່າວສາມາດອະທິບາຍໄດ້ດັ່ງນີ້:

1. ໃນບ້ານທີ່ຖືກຍົກຍ້າຍ ທີ່ດິນແບ່ງປັນ ໃຫ້ຜູ້ທີ່ເຂົ້າມາຢູ່ໃໝ່ບໍ່ພຽງພໍ (ທັງດ້ານຄຸນນະພາບ ແລະ ຂະໜາດ) ຫຼື ຊາວກະສິກອນທີ່ໄດ້ຮັບທີ່ດິນກໍ່ຂາດເຄື່ອງມືເພື່ອຈັດການກັບທີ່ດິນຕອນໃໝ່ນັ້ນ. ໃນບາງກໍລະນີ, ບໍ່ມີຮອດປ່າໄມ້ (ຫຼືມີແຕ່ກໍ່ບໍ່ພຽງພໍ) ຢູ່ໃນເຂດອ້ອມແອ້ມໃກ້ຄຽງ ຊຶ່ງເຮັດໃຫ້ຜູ້ທີ່ຍົກຍ້າຍມາຢູ່ໃໝ່ບໍ່ສາມາດນຳໃຊ້ເຄື່ອງປ່າຂອງດົງທີ່ມີປະໂຫຍດຕໍ່ເຂົາເຈົ້າໄດ້. ເມື່ອຂາດແຫຼ່ງລາຍຮັບຫຼາຍກວ່າໜຶ່ງແຫຼ່ງຂຶ້ນໄປ, ແຮງງານເຫຼົ່ານັ້ນກໍ່ຈະຫັນໄປເປັນແຮງງານຮັບຈ້າງ.

2. ໃນບ້ານທີ່ມີແຮງງານເຄື່ອນຍ້າຍໄປເຮັດວຽກຢູ່ຕ່າງປະເທດ ແລະ ບ້ານທີ່ຕິດພັນກັບຕະຫຼາດມີຈຳນວນແຮງງານຮັບຈ້າງຫຼາຍ. ບ້ານເຫຼົ່ານີ້ ສ່ວນໃຫຍ່ຕັ້ງຢູ່ຕາມທົ່ງຮາບແມ່ນ້ຳຂອງທີ່ມີການພັດທະນາທາງດ້ານກະສິກຳຂ້ອນຂ້າງດີ ແລະ ມີປະຊາກອນອາໄສຢູ່ໜາແໜ້ນ. ອັດຕາສ່ວນຂອງແຮງງານຕໍ່ທີ່ດິນເພີ່ມຂຶ້ນເຮັດໃຫ້ການແບ່ງປັນດິນກະສິກຳຂອງບຸກຄົນຍິ່ງຫຼຸດໜ້ອຍລົງຕື່ມອີກ. ຊາວນາທີ່ສືບທອດເນື້ອທີ່ດິນທີ່ມີຂອບເຂດ ນັບມື້ນັບຫຼຸດໜ້ອຍຖອຍລົງໄປເລື້ອຍໆ ຈຶ່ງຈຳເປັນຕ້ອງຫັນໄປເປັນແຮງງານຮັບຈ້າງທົ່ວໄປ. ການຍ້າຍເຂົ້າມາຕັ້ງຖິ່ນຖານຂອງບຸກຄົນທີ່ບໍ່ມີເນື້ອທີ່ດິນຈາກເຂດຫ່າງໄກສອກຫຼີກ

58 ມີການສຶກສາວິໄຈເອກະລາດຈຳນວນໜຶ່ງໃຊ້ກຸ່ມຕົວແທນໜ້ອຍ ທີ່ໄດ້ພົບເຫັນວ່າແຮງງານຮັບຈ້າງແມ່ນຮູບແບບໃໝ່ຂອງວິຖີຊີວິດ. ເບິ່ງ Bouahom, Douangsavanh ແລະ Rigg (2004) .

59 Visaria (1981); Singh (1988); Srinivasan ແລະ Bardhan (1988).

60 ການແບ່ງປະເພດບ້ານແມ່ນການຈັດກຸ່ມບ້ານທີ່ສະເໜີໃນເອກະສານຊ້ອນທ້າຍ 4.1 ຂອງບົດນີ້.

**ກ່ອງ 4.1: ບາງກໍລະນີທີ່ເກີດຂຶ້ນກັບແຮງງານຮັບຈ້າງທົ່ວໄປ**

ກໍລະນີທີ 1, ຢູ່ແຂວງສາລະວັນ: ມີບໍລິສັດປູກຕົ້ນໄມ້ ໄດ້ຮັບສໍາປະທານທີ່ດິນຂະໜາດໃຫຍ່ ເພື່ອປູກຕົ້ນຢາງກະຕັງກະຕີ້ວ (ຕົ້ນຢາງພາລາ) ປະມານສາມປີ ຢູ່ໃກ້ກັບບ້ານວັງຄະນານ ແລະ ບ້ານສອງຮ່ອງນ້ອຍ (ເມືອງເລົ່າງາມ). ທີ່ດິນສໍາປະທານດັ່ງກ່າວໄດ້ກວມເອົາເນື້ອທີ່ດິນກະສິກໍາຂອງຊາວກະສິກອນ. ດັ່ງນັ້ນ, ແຮງງານຈໍານວນຫຼາຍຄົນທີ່ສູນເສຍທີ່ດິນບາງສ່ວນ ຫຼື ທັງໝົດໄປຈາກ ການສໍາປະທານໄດ້ເລີ່ມຊອກເຮັດວຽກເປັນແຮງງານຮັບຈ້າງທົ່ວໄປເປັນວຽກຕົ້ນຕໍ ເພື່ອລ້ຽງຊີບ. ເຂົາເຈົ້າເຮັດວຽກໃຫ້ບໍລິສັດດັ່ງກ່າວ ເຊັ່ນ: ບຸກເບີກພື້ນທີ່, ກະກຽມທີ່ດິນ ແລະ ປູກເບ້ຍຕົ້ນຢາງ. ປະຈຸບັນນີ້, ເຂົາເຈົ້າໄດ້ຮັບອະນຸຍາດໃຫ້ປູກເຂົ້າແຊມຕາມຫວ່າງເບ້ຍຕົ້ນຢາງກະຕັງກະຕີ້ວ, ແຕ່ວ່າໃນປີຕໍ່ໄປ ກໍ່ຕ້ອງໄດ້ຢຸດການປູກເຂົ້າແຊມຕາມຫວ່າງຕົ້ນຢາງ ເພາະຕົ້ນຢາງຈະໃຫຍ່ຂຶ້ນ ເຮັດໃຫ້ແສງແດດບໍ່ສາມາດສ່ອງລົງມາຮອດພື້ນດິນໄດ້. ເມື່ອບໍ່ມີແສງແດດ, ຕົ້ນເຂົ້າທີ່ປູກຕາມຫວ່າງຕົ້ນຢາງກໍ່ຈະບໍ່ສາມາດຈະເລີນເຕີບໂຕໄດ້.

ກ່ອນການສ້າງຕັ້ງບໍລິສັດ, ຊາວກະສິກອນເຫຼົ່ານີ້ມີອາຊີບເຮັດນາ, ປູກກ້ວຍ ຫຼື ພືດອື່ນໆ. ໃນປະຈຸບັນ, ເຂົາເຈົ້າໄດ້ກາຍມາເປັນແຮງງານຮັບຈ້າງທົ່ວໄປດ້ວຍຄວາມຈໍາເປັນ. ຊີວິດຂອງເຂົາເຈົ້າໄດ້ປ່ຽນໄປ ແລະ ຫຼາຍຄົນກໍ່ມີຊີວິດການເປັນຢູ່ທຸກຍາກລົງ. ເຂົາເຈົ້າຈໍາເປັນຕ້ອງໄດ້ຮຽນຮູ້ທັກສະສີມືໃໝ່ໆ, ປັບຕົວເຂົ້າກັບຫຼັກການເຮັດວຽກໃໝ່ ແລະ ຕ້ອງໄດ້ຫາລາຍໄດ້ເພື່ອໃຫ້ມີຊີວິດຢູ່ລອດ (ຄວບຄູ່ໄປກັບການຮຽນຮູ້ໃໝ່). ຕໍ່ມາ, ເດັກນ້ອຍກໍ່ຕ້ອງໄດ້ເຮັດວຽກເປັນແຮງງານຮັບຈ້າງ, ໂດຍສະເພາະ ໃນເວລາທີ່ຕ້ອງໄດ້ເຮັດວຽກແບບຮັບເໝົາໃຫ້ແລ້ວຕາມກໍານົດເວລາໃນສັນຍາ ຊຶ່ງບໍ່ແມ່ນການເຮັດວຽກຕາມຈໍານວນມື້. ຖ້າໝົດທຸກຄົນໃນຄົວເຮືອນເຮັດວຽກຮ່ວມກັນຈະເຮັດໃຫ້ວຽກນັ້ນແລ້ວໄວຂຶ້ນ; ດັ່ງນັ້ນ ເດັກນ້ອຍຈຶ່ງຕ້ອງໄດ້ເຮັດວຽກນໍາ. ອັດຕາຄ່າຈ້າງບໍ່ສູງ ແລະ ໃນບາງກໍລະນີກໍ່ບໍ່ກາຍ 5,000 ກີບຕໍ່ຄົນຕໍ່ມື້. ແຮງງານບາງຄົນບອກວ່າ ເຂົາເຈົ້າບໍ່ແນ່ໃຈວ່າຄ່າຈ້າງແມ່ນຖືກກໍານົດຂຶ້ນມາແນວໃດ.

ກໍລະນີທີ 2, ຢູ່ແຂວງຫຼວງນໍ້າທາ: ບ້ານສີວິໄລ (ເມືອງລອງ) ແມ່ນບ້ານທີ່ຖືກຈັດກຸ່ມ ຫຼື ຕັ້ງຂຶ້ນໃໝ່ໂດຍໂຮມເອົາຫຼາຍບ້ານທີ່ມີຊົນເຜົ່າອາຄາ ຊຶ່ງຢູ່ໃນກຸ່ມຊົນເຜົ່າໝວດພາສາຈີນ-ຕິເບດ ແລະ ຊົນເຜົ່າລື້ ຢູ່ໃນກຸ່ມຊົນເຜົ່າໝວດພາສາລາວ-ໄຕ ເຂົ້າກັນ. ໃນຂະນະທີ່ການຈັດກຸ່ມບ້ານໃໝ່ດັ່ງກ່າວບໍ່ໄດ້ມີການຍ້າຍບ້ານເຮືອນປະຊາຊົນ-ໝາຍຄວາມວ່າ ກຸ່ມຄົນ ຫຼື ປະຊາຊົນທີ່ມີພື້ນຖານຕ່າງກັນຍັງອາໄສຢູ່ບ່ອນທີ່ເຂົາເຈົ້າເຄີຍຢູ່ມາ. ໃນດ້ານບໍລິຫານປົກຄອງສອງບ້ານໄດ້ຮວມຕົວຕັ້ງຊື່ຂຶ້ນເປັນບ້ານດຽວ ໂດຍມີພື້ນຖານໂຄງລ່າງຕ່າງໆ ເຊັ່ນ: ໂຮງຮຽນຕັ້ງຢູ່ໃນເຂດໃກ້ກັບບ້ານທີ່ເຜົ່າລື້ອາໄສຢູ່. ສ່ວນເຜົ່າອາຄາ ຍັງຄົງອາໄສຢູ່ພື້ນທີ່ສູງຂຶ້ນໄປໃກ້ກັບປ່າໄມ້ ຊຶ່ງເຄີຍມີ ຫຼື ມີພື້ນຖານໂຄງລ່າງຈໍາກັດຫຼາຍ.

ເຜົ່າອາຄາມີມູນເຊື້ອຖາງປ່າເຮັດໄຮ່ມາກ່ອນ ຊຶ່ງເປັນອາຊີບທີ່ ລັດຖະບານ ກໍາລັງປະຕິບັດນະໂຍບາຍໃຫ້ຫັນ ປ່ຽນໄປເຮັດອາຊີບອື່ນແທນ. ໃນດ້ານກົງກັນຂ້າມ, ຊຸມຊົນເຜົ່າລື້ ພັດແມ່ນຊາວກະສິກອນ ທີ່ຄອບຄອງທີ່ດິນຮາບພຽງ. ການທີ່ເຂົາເຈົ້າມີບ້ານຢູ່ໃກ້ກັບເສັ້ນທາງສາຍສໍາຄັນ ຍັງສາມາດເຮັດໃຫ້ເຂົ້າເຖິງຕະຫຼາດໄດ້. ເຜົ່າລື້ມີລະດັບການສຶກສາສູງກວ່າເຜົ່າອາຄາ, ສາມາດເວົ້າພາສາລາວ ແລະ ຍັງມີຫຼາຍຄົນທີ່ຢາກເຮັດວຽກອື່ນທີ່ບໍ່ແມ່ນວຽກກະສິກໍາເພື່ອຫາລາຍໄດ້.

ຊາວກະສິກອນເຜົ່າອາຄາ ໄດ້ເລີ່ມເຮັດວຽກຮັບຈ້າງຢູ່ທົ່ງນາຂອງເຜົ່າລື້ ເພື່ອຫາລາຍໄດ້ເສີມໃສ່ລາຍຮັບທີ່ໄດ້ຈາກການເຮັດໄຮ່ເລື່ອນລອຍ ແລະ ຫາກິນໃນປ່າໄມ້. ການເພີ່ມຂຶ້ນຂອງຈໍານວນປະຊາກອນຍິ່ງເຮັດໃຫ້ທ່າອ່ຽງທີ່ກ່າວມານີ້ເພີ່ມໄວຫຼາຍຂຶ້ນ.

***ແຫຼ່ງຂໍ້ມູນ:*** *ການສໍາຫຼວດພາກສະໜາມ ຂອງກົມສະຖິຕິ, ເດືອນກຸມພາ ປີ 2008*

ແລະ ເຂດພູດອຍ ຍິ່ງເຮັດໃຫ້ມີແຮງກົດດັນທາງດ້ານປະຊາກອນຫຼາຍຂຶ້ນ.

ການກໍາເນີດຂຶ້ນຂອງກຸ່ມແຮງງານຮັບຈ້າງທົ່ວໄປ ສ່ວນໜຶ່ງຍັງສະທ້ອນໃຫ້ເຫັນວ່າຂະບວນການພັດທະນາຍັງຂາດຄວາມສາມາດໃນການສ້າງຄວາມເຂັ້ມແຂງ ໃຫ້ແກ່ພື້ນຖານຊັບພະຍາກອນມະນຸດ, ລະດັບຄວາມສາມາດຂອງປະຊາຊົນ ແລະ ນະໂຍບາຍການນໍາໃຊ້ທີ່ດິນຫຼືອື່ນໆ. ຖ້າບໍ່ດັ່ງນັ້ນ,ແຮງງານກໍ່ຈະມີທາງເລືອກອາຊີບອື່ນຫຼາຍທາງ. ທ່າອ່ຽງທີ່ເກີດຂຶ້ນດັ່ງກ່າວ ຕ້ອງໄດ້ມີການຄວບຄຸມໃຫ້ດີເພື່ອບໍ່ໃຫ້ກາຍເປັນບັນຫາແຜ່ລາມຊໍາເຮື້ອຕໍ່ໄປໃນທ້ອງຖິ່ນ.

ແຮງງານປະມານ 4.5% ແມ່ນຜູ້ເຮັດວຽກ ຫຼື ແຮງງານປະຈໍາ, ໝາຍຄວາມວ່າເຂົາເຈົ້າມີວຽກທີ່ຂ້ອນຂ້າງໝັ້ນຄົງ ຊຶ່ງສ່ວນຫຼາຍກໍ່ແມ່ນພະນັກງານລັດ ຫຼື ພະນັກງານໃນວິສາຫະກິດທີ່ບໍ່ແມ່ນກະສິກໍາ. ຜູ້ເຮັດວຽກປະຈໍາທີ່ເປັນຜູ້ຊາຍມີຫຼາຍກວ່າແມ່ຍິງເຖິງສອງເທົ່າ. ສະພາບການດັ່ງກ່າວສະທ້ອນໃຫ້ເຫັນວ່າ ຜູ້ຊາຍຂ້ອນຂ້າງຈະໄດ້ວຽກດີກວ່າແມ່ຍິງ. ນອກຈາກນີ້, ກໍ່ຍັງເຫັນວ່າ ໃນຈໍານວນແຮງງານຊົນເຜົ່າ ໝວດພາສາລາວ-ໄຕທັງໝົດມີຜູ້ເຮັດວຽກ ຫຼື ແຮງງານປະຈໍາຢູ່ປະມານ 5.9%. ຕົວເລກດັ່ງກ່າວເທົ່າກັບປະມານ 2.1% ຂອງແຮງງານຊົນເຜົ່າໝວດພາສາມອນ-ຂະແມ, 0.6% ຂອງແຮງງານໃນໝວດພາສາຈີນ-ຕິເບດ ແລະ 1.0% ຂອງແຮງງານໃນໝວດພາສາມົ້ງ-ອິວມຽນ. ການທີ່ແຮງງານເຫຼົ່ານີ້ມີຈໍານວນໜ້ອຍໃນກຸ່ມວຽກປະຈໍາທີ່ກ່າວມານັ້ນກໍ່ຍ້ອນວ່າເຂົາເຈົ້າມີລະດັບການສຶກສາຕໍ່າ, ບໍ່ຄ່ອຍມີການເຄື່ອນຍ້າຍທາງດ້ານທີ່ຕັ້ງພູມລໍາເນົາ ແລະ ບໍ່ໃຊ້ພາສາລາວ. ຕໍ່ກັບນະໂຍບາຍຂອງລັດເຫັນວ່າມີຄວາມຈໍາເປັນທີ່ສຸດທີ່ຈະຕ້ອງໄດ້ພິຈາລະນາເລັ່ງເປົ້າໃສ່ເຂດພື້ນທີ່ ແລະ ປະຊາຊົນທີ່ມີຕົວແທນໜ້ອຍໃນວຽກງານປະຈໍາກໍ່ຄືວຽກງານຂອງລັດດັ່ງທີ່ໄດ້ກ່າວມານີ້.

## ສະພາບຂອງວຽກງານໃນປະຈຸບັນ

ສະພາບຂອງວຽກງານໃນປະຈຸບັນ ໝາຍເຖິງ 'ວຽກທີ່ໄດ້ເຮັດແລ້ວ' (ບໍ່ແມ່ນແຮງງານ) ຕາມກິດຈະກໍາທີ່ບຸກ ຄົນເຮັດຢູ່ໃນໄລຍະເວລາໜຶ່ງອາທິດຜ່ານມາ - ສໍາລັບຄໍານິຍາມໃຫ້ເບິ່ງເອກະສານຊ້ອນທ້າຍ

**ຮູບສະແດງ 4.3: ອັດຕາສ່ວນມື້ເຮັດວຽກແຈກຢາຍຕາມສະພາບປະຈຸບັນຂອງວຽກໃນແຕ່ລະລະດູການ**




***ແຫຼ່ງຂໍ້ມູນ:*** *ການສຳຫຼວດການມີວຽກເຮັດງານທຳໃນຊົນນະບົດຂອງໂຄງການ NHDR ປີ 2007-2008, ກົມສະຖິຕິ.*

4.1. ຄວາມແຕກຕ່າງລະຫວ່າງ ‘ແຮງງານ‘ ແລະ ‘ວຽກທີ່ໄດ້ເຮັດແລ້ວ’ ມີຄວາມສຳຄັນໃນສັງຄົມທີ່ການເຮັດວຽກ (ຫຼື ການຫວ່າງງານ) ແລະ ການພັກຜ່ອນບໍ່ໄດ້ຮັບການແຍກແຍະຈາກກັນຈະແຈ້ງ[61]. ຮູບສະແດງ 4.3 ສະແດງອັດຕາສ່ວນການກະຈາຍຂອງຈຳນວນຄົນ-ມື້ ຂອງແຮງງານຈັດແບ່ງຕາມກິດຈະກຳທີ່ພວກເຂົາເຈົ້າກຳລັງເຮັດຢູ່ໃນອາທິດໃດໜຶ່ງ, ໃນສອງລະດູການ (ລະດູຝົນ, ເດືອນກັນຍາ-ຕຸລາ, 2007 ແລະ ລະດູແລ້ງ, ເດືອນມັງກອນ-ກຸມພາ 2008). ຜົນຈາກຮູບສະແດງດັ່ງກ່າວຊີ້ໃຫ້ເຫັນວ່າ ແຮງງານປະຕິບັດຫຼາຍກິດຈະກຳໃນຮອບປີຕາມຮອບວຽນຂອງລະດູການຜະລິດໃນຂະບວນການກະສິກຳການປູກພືດຊະນິດດຽວຂະໜາດໃຫຍ່.

ຂໍ້ສັງເກດສາມຢ່າງທີ່ຄວນເອົາໃຈໃສ່ຄື:

1. ຂໍ້ມູນກ່ຽວກັບສະພາບການເຮັດວຽກຕາມປົກກະຕິຊີ້ໃຫ້ເຫັນວ່າ 64% ຂອງແຮງງານ ຕາມປົກກະຕິແລ້ວ ແມ່ນປະກອບອາຊີບອິດສະຫຼະ ແລະ ປະມານ 25% ແມ່ນແຮງງານເຮັດວຽກໃຫ້ຄອບຄົວທີ່ບໍ່ໄດ້ຮັບຄ່າຈ້າງ. ໃນທາງກົງກັນຂ້າມ, ຂໍ້ມູນກ່ຽວກັບ ສະພາບຂອງວຽກໃນປະຈຸບັນ ຊີ້ໃຫ້ເຫັນວ່າໃນລະດູເຮັດນາປີມີປະມານ 51% ຂອງມື້ເຮັດວຽກທັງໝົດແມ່ນຜູ້ອອກແຮງງານປະກອບອາຊີບອິດສະຫຼະ (ທີ່ຈ່າຍຄ່າຈ້າງໃຫ້ແກ່ຕົນເອງ) ແລະ 16% ຂອງມື້ເຮັດວຽກທັງໝົດດັ່ງກ່າວ ເຂົາເຈົ້າຈະເຮັດວຽກໃຫ້ຄອບຄົວໂດຍບໍ່ມີຄ່າຈ້າງ. ໃນລະດູແລ້ງ, ຕົວເລກດັ່ງກ່າວຫຼຸດລົງ. ດັ່ງນັ້ນ, ຜູ້ອອກແຮງງານສ່ວນໃຫຍ່ໃນຂະແໜງທີ່ບໍ່ແມ່ນກະສິກຳ ແລະ ນອກກະສິກຳຈະເຮັດຫຼາຍວຽກນອກເໜືອຈາກວຽກທີ່ເຮັດຢູ່ເປັນປະຈຳຫຼື ຕາມປົກກະຕິ. ສິ່ງດັ່ງກ່າວຊີ້ໃຫ້ເຫັນວ່າ ຖ້າມີການກຳນົດໄດ້ຢ່າງລະອຽດຊັດເຈນບັນດາວຽກທີ່ບໍ່ແມ່ນກະສິກຳ ແລະ ວຽກນອກລະດູກະສິກຳທີ່ມີທ່າແຮງແລະໃຫ້ການສົ່ງເສີມວຽກງານ ດັ່ງກ່າວກໍ່ຈະສາມາດຊ່ວຍເພີ່ມລາຍຮັບຂອງປະຊາຊົນໃນເຂດຊົນນະບົດໄດ້.

2. ອັດຕາສ່ວນຂອງມື້ເຮັດວຽກຮັບຈ້າງທົ່ວໄປໃນສອງລະດູແມ່ນ 7% ແລະ 15% ຕາມລຳດັບ. ການມີວຽກຮັບຈ້າງທົ່ວໄປເກີດຂຶ້ນ ແລະ ເພີ່ມຂຶ້ນຕາມລະດູການຍິ່ງໃຫ້ນ້ຳໜັກແກ່ຜົນການສຶກສາວິໄຈທີ່ວ່າ ວຽກຮັບຈ້າງທົ່ວໄປດັ່ງກ່າວແມ່ນຄວາມເປັນຈິງທີ່ເກີດຂຶ້ນໃນເຂດຊົນນະບົດຂອງລາວ.

3. ຈຳນວນມື້ທີ່ບໍ່ໄດ້ເຮັດວຽກໃນອາທິດໃດໜຶ່ງ (ຕົວຢ່າງ: ຫວ່າງງານ ຫຼື ບໍ່ສາມາດເຮັດວຽກ) ແມ່ນມີປະມານ 20% ໃນລະດູຝົນ-ເຮັດນາປີ ແລະ 26% ໃນລະດູແລ້ງ-ເຮັດນາແຊງ. ໃນແຕ່ລະມື້, ແຮງງານເຫຼົ່ານັ້ນສາມາດພັກໄປເຮັດວຽກໃນຄົວເຮືອນຂອງຕົນໂດຍສະເພາະກໍ່ແມ່ນແມ່ຍິງ. ໃນບາງກໍລະນີ, ເຂົາເຈົ້າເຫຼົ່ານັ້ນກໍ່ຕັ້ງບໍ່ໄປຊອກວຽກເຮັດ-ໝາຍຄວາມວ່າຢູ່ລ້າໆໂດຍຕັ້ງໃຈຫຼືບໍ່ຕັ້ງໃຈ. ເຖິງຢ່າງໃດກໍ່ຕາມ,ການທີ່ອັດຕາສ່ວນຂອງມື້ບໍ່ເຮັດວຽກໃນອາທິດໃດໜຶ່ງໃນລະດູແລ້ງເພີ່ມຂຶ້ນອີກ 6% (ເປັນ30%) ໃນປະເພດວຽກງານນີ້ໃນລະດູແລ້ງຊີ້ໃຫ້ເຫັນວ່າ ແຮງງານຈຳນວນໜຶ່ງໄດ້ຖອນໂຕອອກຈາກກຳ

61 ບໍ່ມີຄຳນິຍາມແຍກຕ່າງຫາກສຳລັບວຽກແລະການພັກຜ່ອນໃນລະບົບກະສຳກຳປະຖົມບູຮານ:ທຸກກິດຈະກຳແມ່ນຕໍ່ເນື່ອງເຊື່ອງກັນ ແລະກັນ. ໃນຍຸກໃໝ່ທີ່ມີການຫັນເປັນທັນສະໄໝ ແລະການຄ້າ, ສະພາບດັ່ງກ່າວໄດ້ຫຼຸດໜ້ອຍລົງ,ແຕ່ກໍ່ບໍ່ໄດ້ແຍກອອກຈາກກັນ. ດັ່ງນັ້ນ, ສະພາບປົກກະຕິບໍ່ສາມາດບອກເຖິງຄຸນລັກສະນະທັງໝົດຂອງວຽກໄດ້. ດັ່ງນັ້ນ, ໃນສະພາບປະຈຸບັນຈຶ່ງຕ້ອງໄດ້ຮັບການບັນທຶກຕ່າງຫາກ. ເບິ່ງ Kerblay (1966); Polanyi (1943); ແລະ ຫຼາຍໆບັນຫາທີ່ກ່າວໄວ້ໃນ ວາລະສານການສຶກສາກ່ຽວກັບຊາວຊົນນະບົດ ສຳລັບທິດສະດີທີ່ກ່ຽວກັບເສດຖະກິດຂອງຊາວຊົນນະບົດ.

ລັງແຮງງານຕາມລະດູການຍ້ອນບໍ່ມີວຽກງານໃນ ສະພາບທີ່ເອີ້ນກັນວ່າ'ຂອບເຂດການຜະລິດ' ນັ້ນກໍ່ໝາຍຄວາມວ່າມີສະພາບການຈ້າງງານບໍ່ເຕັມສ່ວນ (ຫຼື ທີ່ເອີ້ນກັນວ່າ 'ການເຮັດວຽກ ບໍ່ເຕັມເວລາມາດຕະຖານ. ການລົງສຳຫຼວດ ແລະ ສັງເກດການຕົວຈິງເປັນສິ່ງຢັ້ງຢືນເຖິງສະພາບການດັ່ງກ່າວນີ້ (ເບິ່ງ ກ່ອງ 4.6, 4.7 ແລະ 4.8)[62]. ນອກຈາກນີ້, ຜົນການສຳຫຼວດກໍ່ຍັງເປັນໄປຕາມທີ່ເຮົາຄິດໄວ້ວ່າ ແຮງງານເຫຼົ່ານີ້ ຖອນໂຕອອກຈາກກຳລັງແຮງງານໃນສະພາບທີ່ບໍ່ມີວຽກການຜະລິດໃຫ້ເຮັດ. ເຂົາເຈົ້າເຮັດວຽກອື່ນທີ່ຄິດວ່າ ຈະສາມາດເຮັດໃຫ້ຕົນເອງບໍ່ຫວ່າງງານເຊັ່ນ: ໃຊ້ເວລາທັງໝົດສ້ອມແປງເຮືອນທັງໆທີ່ວຽກນີ້ສາມາດເຮັດໄດ້ໃນເວລາຫວ່າງ ຫຼື ເຮັດເປັນວຽກເສີມ, ໄປນາ ທັງໆທີ່ບໍ່ຈຳເປັນ ແລະ ອື່ນໆ.

ຈາກການສຳພາດໃນບ້ານໜຶ່ງຂອງແຂວງສາລະວັນ, ຊາວໜຸ່ມຈຳນວນໜຶ່ງຈົ່ມວ່າກ່ຽວກັບສະພາບຂາດສີສັນ ທີ່ໜ້າເບື່ອໜ່າຍດັ່ງກ່າວ.

### ສະພາບຂອງວຽກປະຈຸບັນຂອງກຸ່ມແຮງງານທີ່ມາຈາກຊົນເຜົ່າຕາມໝວດພາສາແຕກຕ່າງກັນ

ຊົນເຜົ່າທີ່ຂຶ້ນກັບໝວດພາສາແຕກຕ່າງກັນດຳລົງຊີວິດ ແລະ ເຮັດວຽກງານຢູ່ໃນສະພາບແວດລ້ອມນິເວດກະສິກຳແຕກຕ່າງກັນ ແລະ ປະຕິບັດວິທີການຜະລິດແຕກຕ່າງກັນ. ດັ່ງນັ້ນ, ຈຶ່ງຄາດໄດ້ວ່າການຈັດສັນເວລາໃນການເຮັດວກຂອງເຂົາເຈົ້າຈະມີຄວາມແຕກຕ່າງກັນໄປ. ຕາຕະລາງ 4.1 ຊີ້ໃຫ້ເຫັນເຖິງຄວາມແຕກຕ່າງໃນດ້ານການຈັດສັນເວລາ.

**ລັກສະນະທີ່ມີຢູ່ທົ່ວໄປ:** ແຮງງານຈຳນວນໜຶ່ງຈາກກຸ່ມຊົນເຜົ່າທັງໝົດຢຸດເຊົາຈາກວຽກທີ່ເຄີຍເຮັດປະຈຳໃນລະດູແລ້ງ, ຫຼື ເວົ້າງ່າຍໆ ກໍ່ແມ່ນມີສະພາບການເຮັດວຽກບໍ່ເຕັມເວລາມາດຕະຖານເກີດຂຶ້ນ.

ດ້ານກົງກັນຂ້າມ:

1. ແຮງງານກຸ່ມຊົນເຜົ່າໝວດພາສາອື່ນນອກຈາກຊົນເຜົ່າໝວດພາສາມົ້ງ-ອິວມຽນເຮັດວຽກເປັນແຮງງານຮັບຈ້າງໃນອັດຕາສ່ວນຫຼາຍໃນລະດູແລ້ງ (ເພີ່ມຂຶ້ນອີກ 100% ກວ່າ).

2. ແຮງງານໃນກຸ່ມຊົນເຜົ່າໝວດພາສາ ມົ້ງ-ອິວມຽນ ບໍ່ໄດ້ເຮັດວຽກຮັບຈ້າງອັນໃດເປັນຕົ້ນຕໍ. ສາເຫດທີ່ເປັນໄປໄດ້ອັນໜຶ່ງກໍ່ແມ່ນຍ້ອນເຂົາເຈົ້າອາໄສຢູ່ໃນເຂດພື້ນທີ່ພູດອຍຊຶ່ງບໍ່ຄ່ອຍມີ ຫຼື ມີວຽກຮັບຈ້າງໃຫ້ເຮັດໜ້ອຍ (ໂດຍສະເພາະຢູ່ໃນກຸ່ມຕົວແທນທີ່ສຳຫຼວດ)

3. ກຸ່ມຊົນເຜົ່າໝວດພາສາ ຈີນ-ຕີເບດ ມີອັດຕາສ່ວນແຮງງານຮັບຈ້າງທົ່ວໄປຫຼາຍທີ່ສຸດ ໃນລະດູແລ້ງ. ຊຸມຊົນເຫຼົ່ານີ້ ໄດ້ຫັນຈາກການເຮັດໄຮ່ເລື່ອນລອຍມາຢູ່ທົ່ງພຽງ ແຕ່ຍັງບໍ່ທັນສາມາດປັກຫຼັກແຫຼ່ງໄດ້ເທື່ອ. ຍ້ອນມີທາງເລືອກໃນການເຮັດວຽກຮັບຈ້າງຢູ່ເຂດບ້ານໃກ້ຄຽງ ເຂົາເຈົ້າຈຶ່ງເລືອກເຮັດອາຊີບຮັບ ຈ້າງທົ່ວໄປ. (ກ່ອງ 4.2, ກໍລະນີທີ 2). ເກືອບຢູ່ໃນທຸກກໍລະນີ, ກຸ່ມຄົນເຫຼົ່ານີ້ ຍັງແມ່ນກຸ່ມທຸກຍາກທີ່ສຸດຢູ່ລາວ. ດັ່ງນັ້ນ, ເຂົາເຈົ້າຈຶ່ງບໍ່ມີທາງເລືອກອື່ນ ນອກຈາກເຮັດວຽກຮັບຈ້າງທີ່ບໍ່ຈຳເປັນຕ້ອງໃຊ້ທັກສະສີມືແຮງງານ.

### ສະພາບປະຈຸບັນຂອງວຽກໃນແຕ່ລະປະເພດຂອງບ້ານ

ຕາຕະລາງ 4.2 ສະແດງໃຫ້ເຫັນຈຳນວນມື້ເຮັດວຽກທີ່ຈັດກຸ່ມຕາມບ້ານທັງ 6 ປະເພດ. ໃນຈຳນວນທຸກໆບ້ານ ທັງໝົດແມ່ນມີຈຳນວນມື້ທີ່ແຮງງານໄດ້ເຮັດວຽກຮັບຈ້າງ. ນອກຈາກນີ້, ອັດຕາສ່ວນຂອງມື້ທີ່ເຮັດວຽກເປັນແຮງງານຮັບຈ້າງໃນລະດູແລ້ງມີຂ້ອນຂ້າງສູງກວ່າທຽບກັບລະດູຝົນ. ທຸກໆກຸ່ມຂອງບ້ານກຳລັງປະສົບກັບການຫັນປ່ຽນ, ບາງບ້ານກໍ່ມີການຫັນປ່ຽນແບບຄ່ອຍເປັນຄ່ອຍໄປ ແລະ ບາງບ້ານມີການຫັນປ່ຽນໄປແບບກະທັນຫັນ.

**ຕາຕະລາງ 4.1: ອັດຕາສ່ວນມື້ເຮັດວຽກແຈກຢາຍຕາມສະພາບປະຈຸບັນຂອງວຽກໃນແຕ່ລະລະດູການຂອງແຮງງານທີ່ມາຈາກກຸ່ມຊົນເຜົ່າຕາມໝວດພາສາຕ່າງໆ**

| | ລາວ-ໄຕ | | ມອນ-ຂະແມ | | ຈີນ-ຕີເບດ | | ມົ້ງ-ອິວມຽນ | |
|---|---|---|---|---|---|---|---|---|
| | ລະດູຝົນ | ລະດູແລ້ງ | ລະດູຝົນ | ລະດູແລ້ງ | ລະດູຝົນ | ລະດູແລ້ງ | ລະດູຝົນ | ລະດູແລ້ງ |
| SE | 52.5 | 45.2 | 50.1 | 43.6 | 54.3 | 38.4 | 61.7 | 49.5 |
| UFW | 16.8 | 11.6 | 18.4 | 14.7 | 16.0 | 6.4 | 10.7 | 7.4 |
| RE | 4.9 | 5.0 | 1.6 | 1.7 | 0.5 | 0.6 | 0.9 | 1.4 |
| WE | 7.3 | 13.4 | 5.9 | 12.3 | 12.2 | 32.8 | 3.3 | 2.2 |
| OTH | 18.8 | 24.9 | 24.0 | 27.6 | 16.8 | 21.8 | 23.4 | 39.5 |

SE = ມື້ທີ່ເຮັດວຽກໃຫ້ແກ່ຕົນເອງ; UFW = ມື້ທີ່ເຮັດວຽກໃນຄອບຄົວໂດຍບໍ່ໄດ້ຮັບຄ່າຈ້າງ; RE = ມື້ທີ່ເປັນລູກຈ້າງປະຈຳ; WE = ມື້ທີ່ເປັນແຮງງານຮັບຈ້າງທົ່ວໄປ;
OTH days = (ມື້ອື່ນໆ) ມື້ທີ່ເຮັດວຽກໃນຂອບເຂດຂອງ ວຽກບ້ານ ແລະ ວຽກອື່ນທີ່ບໍ່ແມ່ນວຽກປົກກະຕິທີ່ເຮັດໃນຕະຫຼາດແຮງງານ (ບວກກັບມື້ຫວ່າງວຽກ)
***ແຫຼ່ງຂໍ້ມູນ:*** *ການສຳຫຼວດແຮງງານຊົນນະບົດຂອງ NHDR ສົກປີ 2007-2008, ກົມສະຖິຕິ.*

62 ຫຼາຍຄົວເຮືອນທີ່ມີຄວາມຈຳເປັນຕ້ອງໃຊ້ເງິນ ຈະໃຫ້ຄວາມສຳຄັນກັບເວລາຫຼາຍ ເພາະເວລາສາມາດແລກປ່ຽນເປັນເງິນໄດ້ ຫຼື ສ້າງລາຍຮັບໄດ້. ສະພາບດັ່ງກ່າວນີ້ບໍ່ແມ່ນເລື່ອງແປກປະຫຼາດຢູ່ລາວ: ຫຼາຍປະເທດໃນອາຊີກໍ່ມີຕົວຢ່າງທີ່ຄ້າຍຄືກັນ. ເບິ່ງ Bardhan (1978); Chan ແລະ Acharya (2002); Kim, Chan ແລະ Acharya (2002); Dasgupta (1978).

**ຕາຕະລາງ 4.2: ອັດຕາສ່ວນມື້ເຮັດວຽກຕາມສະພາບປະຈຸບັນຂອງວຽກງານໃນແຕ່ລະດູການ ແລະ ປະເພດບ້ານ**

| | ຫັນປ່ຽນອາຊີບ | | ອື່ນໆ | | ຈັດສັນໃໝ່ | | ຈັດສັນໃໝ່ | | ບ້ານມີການເຄື່ອນຍ້າຍແຮງງານໄປເຮັດວຽກຢູ່ຕ່າງປະເທດ | | ຖືກຍົກຍ້າຍຖິ່ນຖານ | |
|---|---|---|---|---|---|---|---|---|---|---|---|---|
| | ລະດູຝົນ | ລະດູແລ້ງ | ລະດູຝົນ | ລະດູແລ້ງ | ລະດູຝົນ | ລະດູແລ້ງ | ລະດູຝົນ | ລະດູແລ້ງ | ລະດູຝົນ | ລະດູແລ້ງ | ລະດູຝົນ | ລະດູແລ້ງ |
| SE(ມື້) | 60.7 | 34.8 | 48.3 | 38.9 | 51.3 | 47.1 | 58.6 | 52.4 | 62.1 | 46.4 | 45.4 | 48.7 |
| UFW (ມື້) | 17.7 | 7.8 | 25.7 | 9.5 | 18.7 | 18.1 | 6.0 | 10.0 | 7.9 | 5.8 | 9.7 | 12.4 |
| RE (ມື້) | 0.6 | 0.8 | 3.7 | 4.5 | 0.8 | 0.7 | 4.9 | 4.6 | 9.7 | 8.9 | 2.5 | 2.7 |
| WE (ມື້) | 5.6 | 35.9 | 4.3 | 13.4 | 6.7 | 10.0 | 8.4 | 16.9 | 5.4 | 12.5 | 17.3 | 12.9 |
| OTH (ມື້) | 15.4 | 20.8 | 18 | 33.4 | 22.4 | 24.0 | 22.1 | 16.0 | 14.9 | 26.3 | 25.4 | 23.2 |

SE = ມື້ເຮັດວຽກໃຫ້ແກ່ຕົນເອງ; UFW = ມື້ເຮັດວຽກໃນຄອບຄົວໂດຍບໍ່ໄດ້ຮັບຄ່າຈ້າງ; RE = ມື້ເປັນລູກຈ້າງປະຈຳ; WE = ມື້ເປັນແຮງງານຮັບຈ້າງທົ່ວໄປ; OTH = (ມື້ອື່ນໆ) ມື້ເຮັດວຽກໃນບ້ານເຮືອນ ແລະ ວຽກອື່ນທີ່ບໍ່ແມ່ນວຽກປົກກະຕິທີ່ເຮັດໃນຕະຫຼາດແຮງງານ (ບວກກັບມື້ຫວ່າງງານ)

***ແຫຼ່ງຂໍ້ມູນ:*** *ການສຳຫຼວດແຮງງານຊົນນະບົດຂອງ NHDR ສົກປີ 2007-08, ກົມສະຖິຕິ.*

**ກ່ອງ 4.2: ການຄຸ້ມຄອງປະຊາກອນທີ່ຖືກຍົກຍ້າຍ**

ການຫັນປ່ຽນອາຊີບ ແລະ ການຈັດສັນພູມລຳເນົາຕ້ອງໄດ້ຮັບການຄຸ້ມຄອງຢ່າງເອົາໃຈໃສ່ ແລະ ລະອຽດອ່ອນເປັນພິເສດເພື່ອປ້ອງກັນບໍ່ໃຫ້ປະຊາຊົນຊາວຊົນນະບົດ (ໂດຍສະເພາະ ຜູ້ທີ່ມາຈາກກຸ່ມຊົນເຜົ່າຕ່າງໆນອກເໜືອຈາກເຜົ່າໝວດພາສາລາວ-ໄຕ) ໄດ້ຮັບຜົນກະທົບບໍ່ດີຈາກການປ່ຽນແປງທີ່ຄາດຄິດບໍ່ເຖິງ ຫຼື ການປ່ຽນແປງທີ່ບໍ່ເພິ່ງປາດຖະໜາຕໍ່ຊີວິດການເປັນຢູ່ຂອງເຂົາເຈົ້າຕໍ່ກັບການຍົກຍ້າຍບ້ານ. ກ່ອນອື່ນໝົດຕ້ອງເອົາໃຈໃສ່ຮັບປະກັນຄວາມ ໝັ້ນຄົງທາງດ້ານສະບຽງອາຫານໃຫ້ແກ່ເຂົ້າເຈົ້າ. ໃນໄລຍະຍາວ, ນອກຈາກການສ້າງຄວາມເຂັ້ມແຂງໃຫ້ແກ່ຄົນ ແລະ ການສ້າງເງື່ອນໄຂການພັດທະນາໃຫ້ເປັນໄປໄດ້ໄວ ແລະ ທົ່ວເຖິງແລ້ວ, ການສ້າງວຽກເຮັດງານທຳໂດຍກົງໃນຈຳນວນຫຼາຍ ກໍ່ແມ່ນເຄື່ອງມືນະໂຍບາຍໜຶ່ງທີ່ມີປະສິດທິພາບສູງ ຊຶ່ງປະເດັນດັ່ງກ່າວ ຈະໄດ້ສົນທະນາກັນຕື່ມອີກໃນຕອນທ້າຍຂອງບົດນີ້. ສະຫຼຸບແລ້ວກໍ່ຄືການຄຸ້ມຄອງດ້ານການ ຫັນປ່ຽນ ແລະ ການຍົກຍ້າຍຖິ່ນຖານຮຽກຮ້ອງໃຫ້ມີຂໍ້ມູນທີ່ສອດຄ່ອງກັບການເວລາ ແລະ ມີຄຸນນະພາບສູງ. ດ້ານດັ່ງກ່າວນີ້ກໍ່ຕ້ອງໄດ້ຮັບການປັບປຸງໃຫ້ເຂັ້ມແຂງເຊັ່ນດຽວກັນ.

ການຍົກຍ້າຍຖິ່ນຖານມັກຈະສົ່ງຜົນເຮັດໃຫ້ຄວາມເຂັ້ມແຂງຂອງປະຊາຊົນຊາວຊົນນະບົດຫຼຸດລົງ ແລະ ສ່ວນຫຼາຍກໍ່ເຮັດໃຫ້ເຂົາເຈົ້າຂາດຄວາມໝັ້ນໃຈໃນໂຕເອງ. ສາເຫດກໍ່ຍ້ອນວ່າ ເຂົາເຈົ້າໄດ້ຖືກຍົກຍ້າຍໄປສູ່ສະພາບແວດລ້ອມການເຮັດວຽກ ແລະ ການດຳລົງຊີວິດທີ່ບໍ່ຄຸ້ນເຄີຍ, ບາງທີກໍ່ຖືກແຍກຈາກຄອບຄົວ ແລະ ບາງຄັ້ງກໍ່ຍັງມີບັນຫາແຕກຕ່າງທາງດ້ານພາສາປາກເວົ້າ ແລະ ວັດທະນະທຳ. ນັກຊ່ຽວຊານດ້ານມະນຸດວິທະຍາສ່ວນໃຫຍ່ແນະນຳວ່າ ການຍົກຍ້າຍປະຊາຊົນບໍ່ພຽງແຕ່ຈະເອົາໃຈໃສ່ທາງດ້ານກາຍຍະພາບຢ່າງດຽວເທົ່ານັ້ນ ແຕ່ມັນຮຽກຮ້ອງຄວາມເອົາໃຈໃສ່ທາງດ້ານຈິດຕະສາດສັງຄົມນຳອີກດ້ວຍ.

ໂດຍລວມແລ້ວ ລັກສະນະທີ່ໄດ້ກ່າວມາກ່ອນໜ້ານີ້ມີຢູ່ທົ່ວໄປ, ໝາຍຄວາມວ່າມີປະກົດການແຮງງານຮັບຈ້າງທົ່ວໄປເກີດຂຶ້ນຊຶ່ງເພີ່ມຂຶ້ນຫຼາຍຕາມລະດູການ ແລະ ມີສະພາບການເຮັດວຽກບໍ່ເຕັມເວລາມາດຕະຖານ.

ດ້ານກົງກັນຂ້າມ:

1. ບ້ານທີ່ໄດ້ຮັບການຫັນປ່ຽນອາຊີບ(ຢູ່ທາງພາກເໜືອຂອງລາວ) ປະກອບດ້ວຍຫຼາຍຊົນເຜົ່າຢູ່ຮ່ວມກັນຈຳນວນຫຼວງຫຼາຍ. ເຂົາເຈົ້າກຳລັງປະສົບກັບການປ່ຽນແປງຫຼາຍດ້ານ ເຊັ່ນ: ການຫັນມາປູກຕົ້ນຢາງກະຕັງກະຕິ້ວແທນການເຮັດໄຮ່ເລື່ອນລອຍ, ການຕັດໄມ້ທຳລາຍປ່າ, ການຢຸດຕິການປູກຝິ່ນ ແລະ ການຫັນການຜະລິດແບບພໍແຕ່ກຸ້ມກິນມາເປັນການຜະລິດເພື່ອຕະຫຼາດ. ໃນດ້ານຫຼັກການແລ້ວ, ການຫັນປ່ຽນໃດກໍ່ດີລ້ວນແລ້ວແຕ່ສົ່ງຜົນກະທົບຕໍ່ຮູບແບບການຈັດສັນເວລາຂອງແຮງງານທີ່ເຄີຍມີຢູ່ແລ້ວ. ໃນບ້ານເຫຼົ່ານີ້, ການຈັດສັນເວລາເຮັດວຽກງານແມ່ນປ່ຽນແປງໄປຕາມລະດູການຊຶ່ງຈະເຫັນໄດ້ວ່າສະພາບແຮງງານຮັບຈ້າງທົ່ວໄປໃນລະດູແລ້ງ ແລະ ການເຮັດວຽກບໍ່ເຕັມເວລາມາດຕະຖານກຳລັງເພີ່ມຂຶ້ນຫຼາຍ.
2. ບ້ານອື່ນໆ ເຊັ່ນ ບ້ານທີ່ມີການເຄື່ອນຍ້າຍແຮງງານໄປເຮັດວຽກຢູ່ປະເທດໄທ ແລະ ບ້ານທີ່ຕິດພັນກັບຕະຫຼາດກໍ່ກຳລັງມີການພັດທະນາ ໄປສູ່ຄວາມທັນສະໄໝຢ່າງໄວວາ. ດັ່ງນັ້ນ, ເຂົາເຈົ້າຈຶ່ງປະສົບກັບສະພາບບັນຫາ ທີ່ຕ້ອງໄດ້ຈັດແບ່ງທີ່ດິນອອກເປັນຕອນນ້ອຍໆຫຼາຍຕອນເກີນໄປຍ້ອນມີຄວາມກົດດັນທາງດ້ານປະຊາກອນ ຊຶ່ງເຮັດໃຫ້ມີການປ່ຽນແປງຮູບແບບການຈັດສັນເວລາຂອງແຮງງານທີ່ມີຢູ່ ແລະ ສົ່ງຜົນໃຫ້ມີແຮງ

### ກ່ອງ 4.3: ວຽກຮັບຈ້າງໃນບ້ານທີ່ຖືກຈັດສັນໃໝ່

ບ້ານໜອງໃໝ່ ຢູ່ ເມືອງຄຳ, ແຂວງຊຽງຂວາງ ເປັນບ້ານທີ່ຖືກຈັດສັນໃໝ່ ປະກອບດ້ວຍຊາວບ້ານຈາກສອງຊົນເຜົ່າຄື: ເຜົ່າກຶມມຸ (ໝວດພາສາມອນ-ຂະແມ) ແລະ ເຜົ່າມົ້ງ (ໝວດພາສາມົ້ງ-ອິວມຽນ) ມາອາໄສຢູ່ຮ່ວມກັນ. ໃນເວລາທີ່ເຂົາເຈົ້າອາໄສຢູ່ຮ່ວມກັນດ້ວຍຄວາມປອງດອງ ແລະ ຂະຫຍາຍຄວາມສາມັກຄີໃນບ້ານ, ສະພາບດ້ານການເງິນ ຂອງສອງຊົນເຜົ່າດັ່ງກ່າວພັດມີຄວາມແຕກໂຕນກັນຫຼາຍ. ຊາວເຜົ່າມົ້ງ ຢູ່ໃນບ້ານມີຖານະເສດຖະກິດດີກວ່າ. ນອກຈາກການປູກຝັງແລ້ວ, ເຂົາເຈົ້າຍັງລ້ຽງສັດນ້ອຍນຳອີກດ້ວຍ ເຊັ່ນ: ໝູ ແລະ ສັດປີກ. ຈາກສະພາບດັ່ງກ່າວຈະເຫັນໄດ້ວ່າ ການທຳມາຫາກິນຫຼັກຂອງເຂົາເຈົ້າກໍ່ຄືການປະກອບອາຊີບອິດສະຫຼະເກືອບຕະຫຼອດປີ. ນອກນັ້ນ, ເຂົາເຈົ້າກໍ່ຍັງມີການອອມຊັບຈາກປີຜ່ານມາອີກດ້ວຍ.

ໃນທາງກົງກັນຂ້າມ, ເຜົ່າກຶມມຸ ຍັງຄົງຕໍ່ສູ້ດີ້ນຮົນເພື່ອຫັນປ່ຽນຕົນເອງເຂົ້າສູ່ສະພາບໃໝ່ນັ້ນຢູ່. ເຂົາເຈົ້າສ່ວນໃຫຍ່ຍັງ 'ຂາດເຂົ້າກິນ' ແລະ ຢືມເງິນທີ່ມີດອກເບ້ຍສູງ ເພື່ອມາຊື້ເຂົ້າກິນ. ແຕ່ລະປີເຂົາເຈົ້າຈະຕິດໜີ້ຈົນກວ່າຈະຮອດລະດູເກັບກ່ຽວຄັ້ງຕໍ່ໄປທີ່ສາມາດປູກສາລີ ແລະ ຂາຍເພື່ອມາໃຊ້ທົດແທນໜີ້ສິນ. ເຂົາເຈົ້າຈະຢືມອີກ ໃນລະດູແລ້ງ ແລະ ແຫຼ່ງລາຍຮັບຕົ້ນຕໍຂອງເຂົາເຈົ້າໃນລະດູນີ້ ແມ່ນຂາຍແຮງງານຮັບຈ້າງ. ເນື່ອງຈາກເຂົາເຈົ້າບໍ່ມີຄວາມຄຸ້ນເຄີຍກັບການຜະລິດກະສິກຳ (ແຕ່ກ່ອນເຄີຍເຮັດແຕ່ໄຮ່ເລື່ອນລອຍ), ຈຶ່ງເຮັດໃຫ້ເຂົາເຈົ້າບໍ່ສາມາດນຳໃຊ້ທີ່ດິນໃຫ້ເກີດຜົນຜະລິດຫຼາຍ. ຕ່າງຈາກຊົນເຜົ່າມົ້ງ, ເຜົ່າກຶມມຸບໍ່ມີສັດລ້ຽງ ແລະ ບໍ່ມີການອອມຊັບ. ເຂົາເຈົ້າຈະໄປຊອກວຽກເຮັດງານທຳຢູ່ບ້ານໃກ້ຄຽງ ເພື່ອເອົາຄ່າຈ້າງ. ທັງສອງກຸ່ມ ຖືກຍົກຍ້າຍມາຈາກທ້ອງຖິ່ນແຕກຕ່າງກັນ ຢູ່ເຂດພູດອຍ ລົງມາຢູ່ເຂດທົ່ງພຽງໃນໄລຍະທີ່ມີຂະບວນການຍົກຍ້າຍຖິ່ນຖານ. ເຂົາເຈົ້າຄິດຮອດບ້ານເກີດເມືອງນອນຫຼື ຖິ່ນເກົ່າຄອງເດີມທີ່ເຄີຍຢູ່ອາໄສ ແລະ ເຄີຍທຳມາຫາກິນ ໂດຍສະເພາະ ກໍ່ແມ່ນປ່າໄມ້ເນື່ອງຈາກວ່າ ບໍ່ມີປ່າຢູ່ໃນເຂດໃກ້ຄຽງກັບທີ່ຕັ້ງຖິ່ນຖານໃໝ່. ເຖິງຢ່າງໃດກໍ່ຕາມ, ຈະເຫັນໄດ້ວ່າເຜົ່າມົ້ງບໍ່ມີຄວາມຮູ້ສຶກຫຍໍ້ທໍ້ຄືກັບເຜົ່າກຶມມຸ.

***ແຫຼ່ງຂໍ້ມູນ:*** *ການສຳຫຼວດແຮງງານຊົນນະບົດຂອງ NHDR ສົກປີ 2007-2008, ກົມສະຖິຕິ.*

**ຕາຕະລາງ 4.3: ຂອບເຂດການປ່ຽນວຽກງານຂອງແຮງງານໃນໜຶ່ງອາທິດແບ່ງຕາມສະພາບຂອງວຽກໃນແຕລະດູການ**

| ຈຳນວນວຽກງານໃນໜຶ່ງອາທິດ | ລະດູຝົນ (% ຂອງແຮງງານ) | ລະດູແລ້ງ (% ຂອງແຮງງານ) |
|---|---|---|
| ສີ່ | 1.9 | 1.3 |
| ສາມ | 14.8 | 11.1 |
| ສອງ | 51.0 | 41.6 |
| ໜຶ່ງ | 32.3 | 46.1 |
| **ສະເລ່ຍຈຳນວນວຽກ** | **1.86** | **1.67** |

***ແຫຼ່ງຂໍ້ມູນ:*** *ການສຳຫຼວດແຮງງານຊົນນະບົດຂອງ NHDR ສົກປີ 2007-2008, ກົມສະຖິຕິ.*

ງານຮັບຈ້າງທົ່ວໄປໃນລະດູແລ້ງເກີດຂຶ້ນຢ່າງເຫັນໄດ້ປະຈັກຕາ.

3. ບ້ານຈັດສັນໃໝ່ແລະຍົກຍ້າຍມາຕັ້ງຖິ່ນຖານໃໝ່ອັນປະກອບໄປດ້ວຍຫຼາຍຊົນເຜົ່າອາໄສຢູ່ຮ່ວມກັນເຮັດໃຫ້ມີຫຼາຍສະພາບການເກີດຂຶ້ນ ໂດຍສະເພາະກໍ່ແມ່ນ ບັນຫາການແບ່ງກຸ່ມທາງສັງຄົມ (ເບິ່ງ ກ່ອງ 4.3). ໃນບາງກໍລະນີ, ທີ່ດິນທີ່ຈັດສັນໃຫ້ຜູ້ມາຢູ່ໃໝ່ກໍ່ບໍ່ເໝາະສົມແກ່ການປູກຝັງ ເຊັ່ນ: ດິນບາງຕອນກໍ່ມີຕົ້ນໄມ້ຢືນຕົ້ນຢູ່ຢ່າງລຽງລາຍ ແລະ ບາງຕອນຊ້ຳພັດຍັງເປັນຫຼຸບເປັນໂນນຢູ່. ໃນບ້ານຈັດສັນໃໝ່ດັ່ງກ່າວຍັງບໍ່ທັນມີປະກົດການ ແຮງງານຮັບຈ້າງເກີດຂຶ້ນເທື່ອ. ໂດຍທົ່ວໄປແລ້ວ, ການປ່ຽນແປງທີ່ເກີດຂຶ້ນໃນບ້ານທີ່ມີການຍ້າຍຖິ່ນຖານເຫຼົ່ານີ້ຂ້ອນຂ້າງເປັນໄປໃນລັກສະນະໄວວາ ແບບຄາດຄິດບໍ່ເຖິງ ແລະ ໃນບາງກໍລະນີກໍ່ມີຜົນກະທົບໃນທາງລົບເກີດຂຶ້ນ.

## ການປ່ຽນວຽກເລື້ອຍໆເຮັດໃຫ້ອາຊີບຂາດຄວາມໝັ້ນຄົງ

ໃນຂົງເຂດອາຊີບກະສິກຳ, ແຮງງານມັກຈະປ່ຽນວຽກໄປເລື້ອຍໆໃນຊ່ວງໄລຍະເວລາສັ້ນໆ. ຍົກຕົວຢ່າງ, ໃນເວລາທີ່ຊາວກະສິກອນບໍ່ໄດ້ເຮັດວຽກຢູ່ທົ່ງນາຂອງຕົນເອງ, ເຂົາເຈົ້າມັກຈະໄປເຮັດວຽກຢູ່ທົ່ງນາຂອງຄົນອື່ນ ທົດແທນໃນລັກສະນະໝູນວຽນໄປມາ. ຜູ້ທີ່ມີເນື້ອທີ່ດິນກະສິກຳໜ້ອຍຫຼາຍ ຈົນບໍ່ສາມາດມີວຽກເຮັດເພີ່ມໄດ້ ຈະຫັນໄປເປັນກຳມະກອນຮັບຈ້າງເພື່ອຫາລາຍໄດ້ເສີມ. ເຂົາເຈົ້າຈະໄປຫາປາ, ຕັດໄມ້ ຫຼື ໄປຊອກຫາອາຫານເມື່ອວຽກຢູ່ທົ່ງນາຂອງຕົນມີໜ້ອຍ. ຈະເຫັນໄດ້ວ່າ ຖ້າແຮງງານເຫຼົ່ານັ້ນປ່ຽນວຽກຫຼາຍໂພດໃນໜຶ່ງອາທິດ, ເຂົາເຈົ້າຈະບໍ່ມີຄວາມໝັ້ນຄົງ ແລະ ມີຄວາມສ່ຽງທາງດ້ານເສດຖະກິດຈາກຮູບແບບການເຮັດວຽກຂອງເຂົາເຈົ້າ.

ຕາຕະລາງ 4.3 ຊີ້ໃຫ້ເຫັນວ່າແຮງງານສ່ວນໃຫຍ່ເຮັດສອງວຽກໃນລະດູນາປີ ແລະ ວຽກດຽວໃນລະດູແລ້ງ. ແຮງງານທີ່ຢູ່ໃນກຸ່ມມີລາຍຮັບຕໍ່າກວ່າປ່ຽນວຽກເລື້ອຍກວ່າ ທຽບກັບແຮງງານທີ່ມີລາຍຮັບສູງກວ່າໃນລະດູຝົນ ເຖິງວ່າຈະມີຄວາມແຕກຕ່າງໃນແຕ່ລະດູກໍ່ຕາມ (ຮູບສະແດງ 4.4). ເວົ້າລວມແລ້ວ, ສະພາບຄວາມບໍ່ແນ່ນອນດ້ານວຽກເຮັດງານທຳເກີດຂຶ້ນຢ່າງແຜ່ຫຼາຍ.

## *ສະຫຼຸບຫຍໍ້:*

1. *ການປະກົດຕົວຂຶ້ນຂອງແຮງງານຮັບຈ້າງທີ່ບໍ່ມີທັກສະສີມື ຫຼື ທັກສະອັນເປັນພື້ນຖານຂອງການດຳລົງຊີວິດເປັນສິ່ງບອກໃຫ້ຮູ້ ເຖິງສະພາບການດຳລົງຊີວິດ ທີ່ຂັດສົນຢູ່ຊົນນະບົດ. ທາງອອກຂອງບັນຫານີ້ ອາດແມ່ນການສ້າງແຜນງານເພື່ອສ້າງຄວາມເຂັ້ມແຂງ ໃຫ້ແກ່ການປະກອບອາຊີບອິດສະຫຼະຢູ່ຂະແໜງກະສິກຳ, ເພື່ອເຮັດໃຫ້ມີອາຊີບຫຼາກຫຼາຍ ແລະ ຄ້ຳປະກັນດ້ານວຽກເຮັດງານທຳ. ການສ້າງຄວາມເຂັ້ມແຂງທາງດ້ານທັກສະສີມືແຮງງານ ມີຄວາມສຳຄັນ ໃຫ້ແກ່ທາງເລືອກໃນການສ້າງຄວາມເຂັ້ມແຂງ ສຳລັບຜູ້ປະກອບອາຊີບອິດສະຫຼະ ແລະ ເປີດກວ້າງການຜະລິດໄປສູ່ຂະແໜງການອື່ນ. ບົດທີ 3 ຈະເວົ້າເຖິງການສ້າງຄວາມກ້າວໜ້າ ແລະ ຄວາມທັນສະໄໝ ໃຫ້ແກ່ຂະແໜງກະສິກຳ ເພື່ອຮອງຮັບແຮງງານໃຫ້ສາມາດຜະລິດໄດ້ຢ່າງມີປະສິດທິຜົນ.*

2. *ການຖອນໂຕອອກຈາກກຳລັງແຮງງານຕາມລະດູການ (ໃນລະດູແລ້ງ) ຊີ້ໃຫ້ເຫັນເຖິງສະພາບການເຮັດວຽກບໍ່ເຕັມເວລາມາດຖານ. ອີກເທື່ອໜຶ່ງ, ທາງອອກຂອງບັນຫານີ້ກໍ່ຄືກັບທີ່ກ່າວໄວ້ໃນຂໍ້ (1).*

**ຮູບສະແດງ 4.4: ເສັ້ນສະແດງຈຳນວນວຽກສະເລ່ຍໃນໜຶ່ງອາທິດ (ຕາມສະພາບວຽກປະຈຸບັນ) ແບ່ງຕາມສີ່ກຸ່ມລາຍຮັບໃນແຕ່ລະລະດູການ**




***ແຫຼ່ງທີ່ມາ:*** *ການສຳຫຼວດແຮງງານຊົນນະບົດຂອງໂຄງການ NHDR ສົກປີ 2007-2008, ກົມສະຖິຕິ.*

3. *ມີການປ່ຽນວຽກໃນຊ່ວງໄລຍະສັ້ນເກີດຂຶ້ນ. ສະພາບການປ່ຽນວຽກໃນຊ່ວງໄລຍະສັ້ນ ມີຫຼາຍຢູ່ໃນກຸ່ມແຮງງານທີ່ມີລາຍຮັບຕ່ຳ ທຽບກັບກຸ່ມແຮງງານອື່ນໆ. ບັນຫານີ້ສະແດງໃຫ້ເຫັນເຖິງຄວາມສ່ຽງທາງດ້ານເສດຖະກິດຂອງການປ່ຽນວຽກດັ່ງກ່າວ. ທາງອອກຂອງບັນຫາ ແມ່ນຄືກັບທີ່ກ່າວໄວ້ໃນຂໍ້ (1) ຂ້າງເທິງນັ້ນ.*

4. *ແຮງງານເຮັດວຽກໃນກິດຈະກຳນອກລະດູການເກັບກ່ຽວ ແລະ ໃນຂະແໜງທີ່ບໍ່ແມ່ນກະສິກຳໃນເວລາຕ່າງກັນໃນປີໜຶ່ງ ແລະ ໃນລະດັບຄວາມອາດສາມາດຕ່າງກັນ. ດັ່ງນັ້ນ, ຈຶ່ງໜ້າເປັນໄປໄດ້ທີ່ຈະສ້າງຄວາມເຂັ້ມແຂງໃຫ້ແກ່ກິດຈະກຳເຫຼົ່ານີ້ຈຳນວນໜຶ່ງ ເຊັ່ນ: ວຽກນອກລະດູການ ແລະ ນອກຂະແໜງກະສິກຳເພື່ອຂະຫຍາຍຖານການປະກອບອາຊີບເພີ່ມ ແລະ ສ້າງຄວາມໝັ້ນຄົງໃຫ້ແກ່ລາຍຮັບຂອງປະຊາຊົນ.*

## ການຫວ່າງງານໃນກຸ່ມບ້ານທີ່ໄດ້ສຳຫຼວດຢູ່ ສປປ ລາວ

### ການຫວ່າງງານແມ່ນຫຍັງ?

ການຫວ່າງງານ ແມ່ນສະພາບທີ່ບໍ່ມີວຽກເຮັດງານທຳແບບບໍ່ສະໝັກໃຈ. ການຫວ່າງງານ ສ້າງຄວາມທໍ້ຖໍ້ ແລະ ປົມດ້ອຍໃນດ້ານຄວາມຄິດ ແລະ ຊື່ສຽງຂອງປະຊາຊົນ ແລະ ຄອບຄົວຂອງເຂົາເຈົ້າ. ມັນຍັງແມ່ນສາເຫດຕົ້ນຕໍຂອງຄວາມທຸກຍາກຂອງປະຊາຊົນທີ່ມີຖານະເສດຖະກິດຕ່ຳ. ຖ້າປະຊາຊົນບໍ່ມີວຽກເຮັດງານທຳແບບຖາວອນ ຫຼື ຕໍ່ເນື່ອງ, ເຂົາເຈົ້າຈະຂາດທັກສະ ແລະ ສູນເສຍຄວາມສາມາດໃນການເຮັດວຽກ. ນອກນັ້ນກໍ່ຍັງເຮັດໃຫ້ເຂົາເຈົ້າຂາດຄວາມໝັ້ນໃຈໃນຕົນເອງອີກດ້ວຍ. ອັດຕາການຫວ່າງງານວັດແທກໄດ້ຈາກອັດຕາສ່ວນຂອງຜູ້ທີ່ບໍ່ມີວຽກແບບບໍ່ສະໝັກໃຈໃນຄວາມໝາຍທາງດ້ານເສດຖະກິດ ແລະ ຕິດພັນກັບຕະຫຼາດໃນໄລຍະເວລາໃດໜຶ່ງທີ່ກຳນົດຂຶ້ນເຊັ່ນ: ໜຶ່ງອາທິດ, ສອງອາທິດ, ໜຶ່ງເດືອນ ແລະ ອື່ນໆ ຕໍ່ກັບຈຳນວນຄົນທັງໝົດ ທີ່ສະໝັກໃຈເຂົ້າຢູ່ໃນກຳລັງແຮງງານ. ຫຼາຍປະເທດສ່ວນໃຫຍ່ນຳໃຊ້ການວັດແທກດັ່ງກ່າວໃນຫຼາຍໆຮູບແບບແຕກຕ່າງກັນເພື່ອໃຫ້ແທດເໝາະກັບເງື່ອນໄຂທາງດ້ານແຮງງານຂອງເຂົາເຈົ້າ.

ໃນເສດຖະກິດກະສິກຳທີ່ມີລາຍຮັບຕ່ຳ, ການຫວ່າງງານທີ່ເກີດຂຶ້ນໃນໄລຍະຍາວ ແມ່ນມີໜ້ອຍແຕ່ກໍ່ຍັງສາມາດມີການຫວ່າງງານທີ່ແທ້ຈິງເກີດຂຶ້ນໄດ້. ມັນມີຫຼາຍຮູບແບບທີ່ແຕກຕ່າງອອກໄປຊຶ່ງເອີ້ນວ່າ: ສະພາບທີ່ບໍ່ມີວຽກເຮັດງານທຳແບບບໍ່ສະໝັກໃຈຊຶ່ງເກີດຂຶ້ນເປັນໄລຍະໃນຂະບວນຕໍ່ເນື່ອງຂອງການເຮັດວຽກເສດຖະກິດ, ວຽກໃນຄົວເຮືອນ ແລະ ການພັກຜ່ອນ. ພາກນີ້ໄດ້ພະຍາຍາມວັດແທກປະກົດການຂອງການຫວ່າງງານດັ່ງກ່າວນີ້.

### ຮູບແບບຂອງການຫວ່າງງານຕາມປົກກະຕິ ແລະ ການຫວ່າງງານໃນປະຈຸບັນ.

ຖ້າຄິດໄລ່ຈາກສະພາບປົກກະຕິ, ອັດຕາການຫວ່າງງານແມ່ນ 3.4% ໃນຈຳນວນຄົນທີ່ບອກວ່າຕົນເອງເປັນແຮງງານ: 3.3% ໃນຈຳນວນແຮງງານເພດຊາຍ ແລະ 3.5% ຂອງແຮງງານເພດຍິງ (ຮູບສະແດງ 4.5). ໃນຮູບແບບອັດຕາສ່ວນເດັດຖານ, ຖືວ່າອັດຕາສ່ວນດັ່ງກ່າວມີໜ້ອຍເຖິງແມ່ນວ່າຈະສູງກວ່າຕົວເລກຈາກຖານຂໍ້ມູນທີ່ໄດ້ຈາກການສຳຫຼວດພົນລະເມືອງ ແລະ ການສຳຫຼວດການໃຊ້ຈ່າຍ ແລະ ການຊົມໃຊ້. ຕົວເລກດັ່ງກ່າວຍັງສູງກວ່າອັດຕາການຈ້າງງານໄລຍະຍາວຢູ່ປະເທດອື່ນໆ ໃນເຂດອາຊີທີ່ມີລະດັບການພັດທະນາຄ້າຍຄືກັນ ເຊັ່ນ: ຢູ່ຊົນນະບົດຂອງກຳປູເຈຍ, ສ່ວນໜຶ່ງຂອງອິນໂດເນເຊຍ ແລະ ບາງສ່ວນຂອງອາຟຣິກາໃຕ້. ເຖິງຢ່າງໃດກໍ່ຕາມ, ຄວາມແຕກຕ່າງລະຫວ່າງຍິງ-ຊາຍ, ຖ້າມີກໍ່ແມ່ນມີໜ້ອຍ.

**ຮູບສະແດງ 4.5: ອັດຕາສ່ວນແຮງງານຫວ່າງງານຕໍ່ແຮງງານທັງໝົດ ແລະ ອັດຕາສ່ວນມື້ເຮັດວຽກທີ່ມີການຫວ່າງງານຕໍ່ກັບມື້ເຮັດວຽກທັງໝົດ. (ມື້ທີ່ມີການເຮັດວຽກ ແລະ ມື້ທີ່ສາມາດເຮັດວຽກໄດ້ໃນແຕ່ລະ ລະດູການ)**




***ແຫຼ່ງຂໍ້ມູນ:*** *ການສຳຫຼວດແຮງງານຊົນນະບົດຂອງໂຄງການ NHDR ສົກປີ 2007-2008, ກົມສະຖິຕິ.*

**ກ່ອງ 4.4: ເປັນຫຍັງຈຶ່ງມີສະພາບການຫວ່າງງານໄລຍະຍາວບໍ່ຫຼາຍຢູ່ປະເທດກຳລັງພັດທະນາທີ່ມີລາຍຮັບຕ່ຳ?**

*ດ້ານໜຶ່ງ,* ຜູ້ຄົນໂດຍທົ່ວໄປດຳລົງຊີວິດແບບຫາເຊົ້າກິນຄ່ຳ ດັ່ງນັ້ນຈຶ່ງບໍ່ສາມາດໃຊ້ເວລາ 'ຢ່າງຟູມເຟືອຍ' ໄປກັບການຢູ່ລ້າໆໂດຍບໍ່ມີວຽກເຮັດງານທຳດົນ. ດັ່ງທີ່ທ່ານ Gustav F Papanek ໄດ້ກ່າວໄວ້ວ່າ, 'ຜູ້ຄົນມີຄວາມທຸກຍາກເກີນໄປທີ່ຈະປ່ອຍໃຫ້ຕົນເອງບໍ່ມີວຽກເຮັດງານທຳໃນໄລຍະເວລາໃດໜຶ່ງ'.

*ດ້ານສອງ,* ມີ 'ຊ່ອງຫວ່າງທາງສັງຄົມ' ສຳລັບຄົນທີ່ເຊື່ອງຊ້ອນການຫວ່າງງານຂອງຕົນເອງຢູ່ໃນວິສາຫະກິດຂອງຄອບຄົວ ຫຼື ວິສາຫະກິດຂອງພີ່ນ້ອງຕົນເອງ ຫຼື ວິສາຫະກິດທີ່ຕົນເອງຄຸ້ມຄອງ (ສະຖານທີ່ປູກຝັງທົ່ວໄປ, ທົ່ງຫຍ້າສຳລັບລ້ຽງສັດ, ຫ້າງຮ້ານ ແລະ ອື່ນໆ). ສິ່ງດັ່ງກ່າວອາດເຮັດໃຫ້ສະມັດຕະພາບແຮງງານໂດຍລວມ ຫຼຸດລົງ ແຕ່ພັດເຮັດໃຫ້ແຮງງານມີວຽກເຮັດ.

*ດ້ານສາມ,* ຕະຫຼາດແຮງງານຍັງພັດທະນາໃນລະດັບຕ່ຳ. ແຮງງານສ່ວນໃຫຍ່ເຮັດວຽກຢູ່ສະຖານທີ່ປູກຝັງ ຫຼື ວິສາຫະກິດໃນໝວດຂອງການປະກອບອາຊີບອິດສະຫຼະ ຫຼື ເຮັດວຽກໃຫ້ຄອບຄົວໂດຍບໍ່ໄດ້ຮັບຄ່າຈ້າງ. ເມື່ອບໍ່ມີວຽກເຮັດ, ເຂົາເຈົ້າກໍ່ຈະຢຸດເຊົາຈາກວຽກສ້າງເສດຖະກິດທີ່ເຄີຍເຮັດມາປະຈຳແລ້ວໄປເຮັດວຽກເຮືອນ ຫຼື ວຽກສ່ວນຕົວ.

***ເອກະສານອ້າງອີງ:*** *Papanek (1980); Acharya ແລະ Papanek (1995); Papanek (2005).*

ອັດຕາການຫວ່າງງານທີ່ຄິດໄລ່ຈາກສະພາບປະຈຸບັນ ເຊັ່ນ: ເວລາຫວ່າງວຽກແບບບໍ່ສະໝັກໃຈໃນໄລຍະຕໍ່ເນື່ອງຂອງເວລາເຮັດວຽກ ແລະ ເວລາບໍ່ມີວຽກເຮັດ ໃນສອງໄລຍະເວລາທີ່ມີການສຳຫຼວດແມ່ນມີສູງປະມານ 12.7% ແລະ 15.7% ຕາມລຳດັບ, ຊຶ່ງສູງກວ່າອັດຕາການຫວ່າງງານ ທີ່ຄິດໄລ່ຕາມສະພາບປົກກະຕິ 4 ເທື່ອ.ໃນລະດູຝົນ, ອັດຕາການຫວ່າງງານຂອງແມ່ຍິງຕ່ຳກວ່າຂອງຜູ້ຊາຍ ແຕ່ວ່າສູງກວ່າໃນລະດູແລ້ງ. ໂດຍລວມແລ້ວ, ອັດຕາການຫວ່າງງານຂອງແມ່ຍິງສູງກວ່າຜູ້ຊາຍໜ້ອຍໜຶ່ງ ຊຶ່ງຊີ້ໃຫ້ເຫັນວ່າການສະໜອງ ຫຼື ຄວາມຕ້ອງການແຮງງານແມ່ຍິງ ແລະ ຜູ້ຊາຍມີຄວາມແຕກຕ່າງກັນ. ເມື່ອມີອັດຕາການຫວ່າງງານສູງຫຼາຍ, ມັນຮຽກຮ້ອງໃຫ້ມີການແກ້ໄຂຢ່າງທັນທີທັນໃດ. ໃນບາງປະເທດ, ສິດທິໃນການເຮັດວຽກງານແມ່ນໄດ້ຖືກບັນຍັດໄວ້ຢູ່ໃນກົດໝາຍ.

### ຄົນທຸກຍາກມີອັດຕາການຫວ່າງງານໃນອັດຕາສ່ວນສູງກວ່າ

ແຮງງານລາຍຮັບຕ່ຳມີຈຳນວນການຫວ່າງງານ ຫຼື ຄວາມຖີ່ຂອງການຢຸດງານແບບບໍ່ສະໝັກໃຈເກີດຂຶ້ນຢູ່ບ່ອນເຮັດວຽກຫຼາຍກວ່າກຸ່ມແຮງງານອື່ນໆ ຍ້ອນເຂົາເຈົ້າເຫຼົ່ານັ້ນ ມີໂອກາດເຂົ້າເຖິງຊັບພະຍາກອນການຜະ ລິດຈຳກັດ (ຮູບສະແດງ 4.6)[63]. ອັດຕາສ່ວນດັ່ງກ່າວຍິ່ງມີສູງໃນລະດູຝົນທຽບໃສ່ລະດູແລ້ງ ຊຶ່ງຊີ້ໃຫ້ເຫັນວ່າໃນລະດູແລ້ງຜູ້ທີ່ມີລາຍຮັບບໍ່ຕ່ຳປານໃດກໍ່ຕ້ອງປະສົບກັບສະພາບຄວາມບໍ່ແນ່ນອນດ້ານວຽກເຮັດງານທຳເຊັ່ນດຽວກັນ. ດັ່ງນັ້ນ, ສິ່ງສຳຄັນທີ່ສຸດ ແມ່ນຕ້ອງສ້າງວຽກເຮັດງານທຳໃຫ້ຫຼາຍຂຶ້ນໃນກຸ່ມຄົນທຸກຍາກ ເພື່ອແກ້ໄຂບັນຫາຄວາມທຸກຍາກ ແລະເພີ່ມການພັດທະນາມະນຸດ.

63 ຂໍ້ມູນ (ບໍ່ໄດ້ອ້າງຢູ່ນີ້) ຊີ້ໃຫ້ເຫັນວ່າແຮງງານທີ່ມີທັກສະສີມືຕ່ຳຍັງພົບກັບສະພາບການຫວ່າງງານສູງກວ່າ.

### ການຫວ່າງງານຂອງຊາວໜຸ່ມມີສູງກວ່າກຸ່ມແຮງງານໃນເກນອາຍຸສູງກວ່າ

ສະພາບການຫວ່າງງານຂອງຊາວໜຸ່ມ ແມ່ນມີສູງກວ່າຖ້າທຽບກັບຜູ້ທີ່ມີອາຍຸສູງກວ່ານັ້ນ (ຮູບສະແດງ 4.7). ຊາວໜຸ່ມທີ່ຍັງໃໝ່ຕໍ່ຕະຫຼາດແຮງງານເຂົ້າຫາຕະຫຼາດແຮງງານຄັ້ງທຳອິດຂ້ອນຂ້າງຍາກ. ຕາມທີ່ເຄີຍເປັນມາ, ແຮງງານເຫຼົ່ານີ້ໄດ້ທີ່ດິນກະສິກຳມາຈາກການບຸກເບີກພື້ນທີ່ປ່າໄມ້. ໃນສະພາບທີ່ທາງເລືອກດັ່ງກ່າວມີ ໜ້ອຍລົງຈຶ່ງເກີດມີສະພາບການຫວ່າງງານຂຶ້ນຢ່າງເຫັນໄດ້ແຈ້ງໃນກຸ່ມຄົນເຫຼົ່ານີ້. ໃນປະຈຸບັນ, ເຂົາເຈົ້າຍັງມີຄວາມຄາດຫວັງຕ່າງກັນ ຍ້ອນໄດ້ຮູ້ໄດ້ເຫັນສິ່ງຕ່າງໆຈາກໂທລະພາບ, ສື່ຕ່າງໆ (ລວມເຖິງການເດີນທາງໄປມາ) ແລະ ຄວາມຢາກເຮັດວຽກຢູ່ໃນພື້ນທີ່ທົ່ງນາມີໜ້ອຍລົງ. ຄວາມຈິງແລ້ວ, ສະພາບການດັ່ງກ່າວນີ້ແມ່ນ ມີຢູ່ທົ່ວໄປຢ່າງກວ້າງຂວາງໂດຍສະເພາະຢູ່ໃນເຂດທົ່ງພຽງແມ່ນ້ຳຂອງ. ອີກດ້ານໜຶ່ງ, ເບິ່ງຄືວ່າຈະບໍ່ມີທາງອື່ນ ເລີຍນອກຈາກຈະຕ້ອງຂະຫຍາຍໂອກາດວຽກເຮັດງານທຳຢູ່ສະຖານທີ່ປູກຝັງ (ໂດຍການ ເຮັດກະເສດສຸມໃຫ້ຫຼາຍຂຶ້ນ) ແລະ ຢູ່ຂະແໜງການອື່ນທີ່ບໍ່ແມ່ນກະສິກຳເພື່ອແກ້ໄຂບັນຫາການຫວ່າງງານຂອງຊາວໜຸ່ມ.

### ຊາວກະສິກອນປູກພືດປະສົບກັບບັນຫາການຫວ່າງງານຫຼາຍກວ່າກຸ່ມອື່ນໆ

ແຮງງານໃນຄອບຄົວທີ່ບໍ່ໄດ້ຮັບຄ່າຈ້າງ ແລະ ຜູ້ທີ່ປະກອບອາຊີບອິດສະຫຼະປະສົບກັບບັນຫາອັດຕາການຫວ່າງງານໃນປະຈຸບັນສູງກວ່າກຸ່ມຄົນອື່ນໆ ແລະ ຊາວກະສິກອນປູກພືດມີການຫວ່າງງານໃນປະຈຸບັນສູງກວ່າກຸ່ມອື່ນໆທີ່ບໍ່ໄດ້ເຮັດວຽກໃນຂະແໜງການປູກພືດເຊັ່ນດຽວກັນ (ຕາຕະລາງ 4.4). ຊາວກະສິກອນເຫຼົ່ານີ້ມີອັດຕາການຫວ່າງງານຫຼາຍກວ່າກໍ່ຍ້ອນວ່າເຂົາເຈົ້າກຳລັງຂາດທີ່ດິນກະສິກຳ ແລະ ມີລະດັບຄວາມເອົາໃຈໃສ່ໃນການຜະລິດກະສິກຳກໍ່ຕ່ຳ (ມີການປູກພືດພຽງລະດູດຽວໃນໜຶ່ງປີ). ນອກຈາກນີ້, ອັດຕາການຫວ່າງງານທີ່ສູງກວ່າດັ່ງກ່າວ ກໍ່ມາຈາກການຫັນໄປນຳໃຊ້ເຄື່ອງກົນຈັກ ເຂົ້າໃນການຜະລິດກະສິກຳຊຶ່ງເຮັດໃຫ້ຄວາມຕ້ອງການແຮງງານເຮັດວຽກກັບທີ່ດິນໜ້ອຍລົງ. ໂອກາດໃນການເຂົ້າເຖິງປ່າໄມ້ໜ້ອຍລົງ ຫຼື ການທີ່ແຫຼ່ງນ້ຳບົກແຫ້ງລົງຍິ່ງເຮັດໃຫ້ມີບັນຫາໜັກໜ່ວງຂຶ້ນເພາະວ່າປ່າໄມ້ ແລະ ແຫຼ່ງນ້ຳເຄີຍເປັນແຫຼ່ງສະໜອງລາຍຮັບເສີມ ແລະ ຮັບປະກັນສະບຽງອາຫານໃນເວລາທີ່ການປູກພືດບໍ່ໄດ້ຮັບໝາກຜົນດີ. ໃນເຂດມີການນຳເອົາວິທີການຜະລິດກະສິກຳແບບທັນສະໄໝມາໃຊ້, ການນຳໃຊ້ແຮງງານຂ້ອນຂ້າງສູງ, ແຕ່ກໍ່ບໍ່ສູງຄືສະໄໝແຕ່ກ່ອນໃນໄລຍະຕົ້ນໆ ທີ່ມີການປູກເຂົ້າແບບກະເສດສຸມຢູ່ອາຊີຕາເວັນອອກ[64]. ຊາວກະສິກອນປະສົບກັບບັນຫາສະພາບການຫວ່າງງານເພາະວ່າ ເຂົາເຈົ້າຂາດຄວາມພ້ອມເພື່ອໄປເຮັດວຽກນອກຂະແໜງກະສິກຳ: ເຂົາເຈົ້າບໍ່ມີທັງທັກສະສີມື ແລະ ເງື່ອນໄຂພາຍນອກຕ່າງໆ ເພື່ອສາມາດເຮັດວຽກນອກຂະແໜງກະສິກຳໄດ້. ດັ່ງນັ້ນ, ເຖິງແມ່ນວ່າອັດຕາສ່ວນຂອງທີ່ດິນຕໍ່ແຮງງານຈະຫຼຸດລົງກໍ່ຕາມ ແຕ່ເຂົາເຈົ້າກໍ່ບໍ່ມີທາງເລືອກອື່ນນອກຈາກຈະເຮັດວຽກໃນພື້ນທີ່ດິນຂອງຕົນເອງເທົ່ານັ້ນ.

ໃນລະດູແລ້ງ, ແຮງງານໃນເກືອບທຸກກຸ່ມ ແລະ ທຸກຂະແໜງການຕ່າງກໍ່ປະເຊີນກັບສະພາບການຫວ່າງງານສູງຂຶ້ນໃນລະດັບແຕກຕ່າງກັນໄປໃນແຕ່ລະກຸ່ມ: ການຫວ່າງງານຂອງແຮງງານນອກຂະແໜງກະສິກຳ ເຊັ່ນ: ພະນັກງານປະຈຳ, ກຳມະກອນຂຸດຄົ້ນບໍ່ແຮ່ ແລະ ແຮງງານທີ່ບໍ່ແມ່ນຊາວກະສິກອນແມ່ນມີອັດຕາສ່ວນຕ່ຳກວ່າ.

**ກ່ອງ 4.5: ສອງຄຳນິຍາມຂອງການຫວ່າງງານ**

1. ສະພາບການຫວ່າງງານປົກກະຕິ: ອີງໃສ່ນິຍາມດັ່ງກ່າວນີ້, ບຸກຄົນໃດໜຶ່ງຖືວ່າຫວ່າງງານຖ້າຫາກບຸກ ຄົນຜູ້ນັ້ນບໍ່ມີວຽກເຮັດງານທຳໂດຍບໍ່ສະໝັກໃຈ ໃນໄລຍະເວລາສ່ວນໃຫຍ່ ຂອງໄລຍະເວລາໃດໜຶ່ງ ທີ່ຍາວສົມຄວນເຊັ່ນ: ຫົກເດືອນຫຼືຫຼາຍກວ່ານັ້ນ. ອັດຕາການຫວ່າງງານແມ່ນອັດຕາສ່ວນ (%) ຂອງຜູ້ຫວ່າງງານຕໍ່ຈຳນວນກຳລັງແຮງງານທັງໝົດ (ຜູ້ມີວຽກເຮັດບວກກັບຜູ້ບໍ່ມີວຽກເຮັດ).

2. ສະພາບການຫວ່າງງານໃນປະຈຸບັນ: ນິຍາມດັ່ງກ່າວນີ້ ແມ່ນໄຈ້ແຍກໃຫ້ເຫັນຊ່ວງໄລຍະຂາດວຽກເຮັດແບບບໍ່ສະໝັກໃຈທີ່ເກີດຂຶ້ນໃນແຜນວຽກປະຈຳອາທິດຂອງແຮງງານ. ວິທີນີ້ໄດ້ນັບຈຳນວນທັງໝົດຂອງ 'ເຄິ່ງມື້' ທີ່ແຮງງານບໍ່ໄດ້ເຮັດວຽກໂດຍບໍ່ສະໝັກໃຈໃນອາທິດດັ່ງກ່າວທີ່ຍົກຂຶ້ນມາອ້າງອີງ. ອັດຕາການຫວ່າງງານ (ຕາມສະພາບປະຈຸບັນ) ແມ່ນຄິດໄລ່ຈາກອັດຕາສ່ວນ (%) ຂອງຜົນລວມຂອງມື້ເຮັດວຽກທີ່ມີການຫວ່າງງານເກີດຂຶ້ນຕໍ່ມື້ເຮັດວຽກທັງໝົດ (ມື້ທີ່ມີການເຮັດວຽກ, ມື້ທີ່ມີການຖອນອອກຈາກກຳລັງແຮງງານຊົ່ວຄາວ ແລະ ມື້ທີ່ສາມາດເຮັດວຽກໄດ້) ໃນໜຶ່ງອາທິດ.

**ສິ່ງທີ່ຄວນເອົາໃຈໃສ່:** ອັດຕາການຫວ່າງງານໃນສະພາບປະຈຸບັນບໍ່ສາມາດນຳໃຊ້ເພື່ອແຍກແຍະໃຫ້ເຫັນຜູ້ຫວ່າງງານໄດ້ ເນື່ອງຈາກວ່າ ມັນໄດ້ຮວມເອົາເວລາທີ່ບໍ່ມີການເຮັດວຽກຂອງຫຼາຍຄົນແຕກຕ່າງກັນ ຊຶ່ງເປັນໄປໄດ້ສູງທີ່ເຂົາເຈົ້າເຫຼົ່ານັ້ນຈະໃຊ້ເວລາສ່ວນໃຫຍ່ເຂົ້າໃນເວລາເຮັດວຽກຂອງຕົນ. ເຮົາບໍ່ຄວນນຳເອົາອັດຕາດັ່ງກ່າວມາປຽບທຽບກັບອັດຕາການຫວ່າງງານທີ່ຄິດໄລ່ຕາມວິທີປົກກະຕິເຊັ່ນ: ອັດຕາສ່ວນຂອງຈຳນວນຜູ້ຫວ່າງງານຕໍ່ແຮງງານທັງໝົດເປັນຕົ້ນ.

***ເອກະສານອ້າງອີງ:*** *Acharya (1983), Visania (1981)*

**ຕາຕະລາງ 4.4: ອັດຕາສ່ວນການຫວ່າງງານປະຈຸບັນຕາມສະພາບວຽກປົກກະຕິ ແລະ ຕາມປະເພດແຮງງານໃນແຕ່ລະລະດູການ**

| | ປະເພດ | ລະດູຝົນ | ລະດູແລ້ງ |
|---|---|---|---|
| 1 | ປະກອບອາຊີບອິດສະຫຼະ | 11.4 | 14.2 |
| 2 | ແຮງງານໃນຄອບຄົວທີ່ບໍ່ໄດ້ຮັບຄ່າຈ້າງ | 11.7 | 17.1 |
| 3 | ລູກຈ້າງປະຈຳ | 0.5 | 5.9 |
| 4 | ແຮງງານຮັບຈ້າງທົ່ວໄປ | 6.9 | 14.7 |

| | ປະເພດ | ລະດູຝົນ | ລະດູແລ້ງ |
|---|---|---|---|
| 1 | ພືດກະສິກຳ | 13.1 | 16.7 |
| 2 | ກະສິກຳອື່ນໆ | 7.0 | 11.9 |
| 3 | ຂຸດຄົ້ນບໍ່ແຮ່ | 0.5 | 4.8 |
| 4 | ບໍ່ແມ່ນກະສິກຳ | 3.7 | 8.5 |

***ແຫຼ່ງຂໍ້ມູນ:*** *ການສຳຫຼວດແຮງງານຊົນນະບົດຂອງໂຄງການ NHDR ສົກປີ 2007-2008, ກົມສະຖິຕິ.*

64 Ishikawa (1967, 1981) ໄດ້ຄາດຄະເນວ່າໃນຊຸມປີ 1930s to 1950s, ການປູກເຂົ້າແບບກະເສດສຸມຢູ່ຍີປຸ່ນ, ເກົາຫຼີ ແລະ ໄຕ້ຫວັນ ໄດ້ຈ້າງແຮງງານເຖິງ 300 ຄົນຕໍ່ມື້/ຕໍ່ເຮັກຕາ. ເຖິງຢ່າງໃດກໍ່ຕາມ, Jaysuriya ແລະ Chand (1986), ຍັງໄດ້ພົບວ່າຮອດຊຸມປີ 1970s ແລະ 1980s ລັກສະນະການຈ້າງງານຕາມທີ່ Ishikawa ອ້າງໄວ້ຈະບໍ່ມີອີກແລ້ວ.

**ຮູບສະແດງ 4.6: ອັດຕາສ່ວນນີ້ຫວ່າງງານຕາມສະພາບປະຈຸບັນຕໍ່ນີ້ເຮັດວຽກທັງໝົດແບ່ງຕາມສີ່ກຸ່ມລາຍຮັບໃນແຕ່ລະລະດູການ**




***ແຫຼ່ງຂໍ້ມູນ:*** *ການສໍາຫຼວດແຮງງານຊົນນະບົດຂອງໂຄງການ NHDR ສົກປີ 2007-2008, ກົມສະຖິຕິ.*

**ກ່ອງ 4.6: ການຫວ່າງງານຕາມລະດູການ**

ກຸ່ມເປົ້າໝາຍສໍາຄັນທີ່ໄດ້ສໍາພາດ ແມ່ນແມ່ຍິງອາຍຸແຕ່ 30-40 ປີ:

'ໃນລະດູຝົນ, ພວກເຮົາມີວຽກເຮັດ...ໝົດທຸກຄົນໄປເຮັດນາ, ເຖິງແມ່ນຜູ້ທີ່ມັກໄປອອກແຮງງານຢູ່ນອກບ້ານກໍ່ຍັງກັບມາຊ່ວຍເຮັດນາໃນລະດູນີ້'. ແຕ່ວ່າ, ຫຼັງຈາກລະດູຝົນ ແລະ ເກັບກ່ຽວເຂົ້ານາປີແລ້ວ, ພວກເຮົາກໍ່ບໍ່ມີຫຍັງເຮັດ. ພວກເຮົາບໍ່ມີຊົນລະປະທານເພື່ອເຮັດນາແຊງ ຫຼື ປູກພືດລະດູແລ້ງ. ຊາວໜຸ່ມຍັງມີທາງເລືອກທີ່ຈະອອກໄປເຮັດວຽກນອກແຕ່ວ່າພວກເຮົາແມ່ຍິງຕ້ອງໄດ້ເບິ່ງແຍງລູກ ແລະ ເຮືອນຊານຈຶ່ງບໍ່ມີໂອກາດ ຫຼື ມີໂອກາດໜ້ອຍທີ່ຈະໄປເຮັດວຽກອື່ນ. ພວກເຮົາຢາກໃຫ້ມີວຽກເຮັດຄືກັນແຕ່ຕ້ອງຢູ່ໃກ້ກັບເຮືອນ ຫຼື ບ້ານ. ປະຈຸບັນ, ພວກເຮົາຢູ່ບ້ານຄືກັບວ່າມີວຽກຫຼາຍ, ພະຍາຍາມລ້ຽງດູເດັກນ້ອຍ, ແຕ່ໄຂ້ຫວັດນົກປີກາຍນີ້ເຮັດໃຫ້ສັດປີກພວກເຮົາຂາຍອອກບໍ່ໄດ້ຈຶ່ງຍິ່ງເຮັດໃຫ້ພວກເຮົາບໍ່ມີວຽກເຮັດ'.

***ກຸ່ມແມ່ຍິງໄວກາງຄົນ, ບ້ານດອນກົງຂາວ, ເມືອງຄົງເຊໂດນ, ແຂວງສາລະວັນ,***
***ການສໍາຫຼວດພາກສະໜາມ:*** *ເດືອນກຸມພາ ປີ 2008*

## ສະພາບການຫວ່າງງານແຕກຕ່າງກັນໄປຕາມແຕ່ລະປະເພດຂອງບ້ານ ແລະ ກຸ່ມຊົນເຜົ່າ

ສະພາບການຫວ່າງງານແມ່ນມີຢູ່ໃນບ້ານທຸກປະເພດ, ແຕ່ລະດັບຄວາມເຂັ້ມຂອງການຫວ່າງງານອາດແຕກຕ່າງກັນໄປຕາມປະເພດບ້ານດັ່ງກ່າວ, ຕາມກຸ່ມຊົນເຜົ່າ ແລະ ຕາມລະດູການ (ຕາຕະລາງ 4.5). ເວົ້າງ່າຍໆ ກໍ່ຄືທົ່ວປະເທດລາວ ປະສົບກັບສະພາບການມີວຽກເຮັດງານທໍາໜ້ອຍລົງ ໂດຍສະເພາະກໍ່ແມ່ນໃນລະດູແລ້ງ. ສະພາບດັ່ງກ່າວຮຽກຮ້ອງ ໃຫ້ມີການເຂົ້າໄປແກ້ໄຂໂດຍໄວ.

ສະຫຼຸບແລ້ວ, ຢູ່ບາງເຂດຂອງລາວເຮົາ ຍັງມີສະພາບການຂາດແຮງງານ, ໂດຍສະເພາະຢູ່ເຂດທີ່ມີການປູກຕົ້ນຢາງກະຕັງກະຕິ້ວ. ສາເຫດທີ່ເຮັດໃຫ້ມີສະພາບການຫວ່າງງານ ແລະ ການຂາດແຮງງານເກີດຂຶ້ນນັ້ນກໍ່ຍ້ອນວ່າ ການຫວ່າງງານ ມັກເກີດຂຶ້ນໃນໄລຍະທີ່ມີການປູກເຂົ້າ ແລະ ການປູກຕົ້ນໄມ້ ເຊັ່ນ: ການປູກຢາງກະຕັງກະຕິ້ວບໍ່ຮັບຈ້າງແຮງງານ (ເຊັ່ນ: ລະດູແລ້ງ ຫຼື 'ນອກລະດູການປູກຝັງ'). ນອກຈາກນີ້, ການເຮັດວຽກກ່ຽວກັບການປູກຕົ້ນໄມ້ອາດຮຽກຮ້ອງໃຫ້ແຮງງານເດີນທາງໄກ ຊຶ່ງອາດບໍ່ຄຸ້ມຄ່າກັບອັດຕາຄ່າຈ້າງປະຈຸບັນ. ບັນຫາກ່ຽວກັບ ການຂາດແຮງງານຕາມລະດູການອາດກາຍເປັນບັນຫາຮ້າຍແຮງຂຶ້ນໃນອະນາຄົດເມື່ອຕົ້ນຢາງກະຕັງກະຕິ້ວໃຫຍ່ພໍເກັບກ່ຽວເອົານໍ້າຢາງໄດ້.

**ຮູບສະແດງ 4.7: ເສັ້ນສະແດງອັດຕາສ່ວນນີ້ຫວ່າງງານຕາມສະພາບປະຈຸບັນຕໍ່ນີ້ເຮັດວຽກທັງໝົດແບ່ງຕາມກຸ່ມອາຍຸໃນແຕ່ລະດູການ.**




***ແຫຼ່ງຂໍ້ມູນ:*** *ການສຳຫຼວດແຮງງານຊົນນະບົດຂອງໂຄງການ NHDR ສົກປີ 2007-08, ກົມສະຖິຕິ.*

**ຕາຕະລາງ 4.5: ອັດຕາສ່ວນການຫວ່າງງານແບ່ງຕາມປະເພດບ້ານ ແລະ ຊົນເຜົ່າໃນແຕ່ລະ ລະດູການ**

| | ປະເພດບ້ານ | | | | | | | |
|---|---|---|---|---|---|---|---|---|
| | ການທັນປ່ຽນ | ອື່ນໆ | ຈັດກຸ່ມໃໝ່ | ຕິດພັນກັບຕະຫຼາດ | ການເຄື່ອນຍ້າຍແຮງງານ | ຍົກຍ້າຍຖິ່ນຖານ | ເຜົ່າໝວດລາວ-ໄຕ | ກຸ່ມຊົນເຜົ່າອື່ນໆ |
| ລະດູຝົນ | 7.9 | 10.6 | 12.9 | 10.2 | 11.8 | 22 | 11.8 | 15.6 |
| ລະດູແລ້ງ | 15.9 | 18.7 | 9.6 | 9.4 | 19.6 | 19.5 | 14.3 | 16.0 |

***ແຫຼ່ງຂໍ້ມູນ:*** *ການສຳຫຼວດແຮງງານຊົນນະບົດຂອງໂຄງການ NHDR ປີ 2007-08, ກົມສະຖິຕິ.*

## ຜູ້ອອກແຮງງານເຫຼົ່ານີ້ໄດ້ເຮັດວຽກບໍ່ ຫຼື ບໍ່ຖືກຈ້າງ

ມີຄວາມເປັນໄປໄດ້ທີ່ຈະເຫັນແຮງງານທີ່ໄດ້ຮັບການຝຶກອົບຮົມທັກສະສີມືດ້ານໃດໜຶ່ງ ແລະ ໄດ້ໄປເຮັດວຽກອື່ນທີ່ບໍ່ກ່ຽວຂ້ອງກັບທັກສະທີ່ຮຽນມາ (ຢ່າງບໍ່ສະໝັກໃຈ) ໂດຍສະເພາະຢູ່ໃນໄລຍະເສດຖະກິດຂ້າມຜ່ານ[65]. ແຮງງານເຫຼົ່ານັ້ນອາດບໍ່ພໍໃຈກັບປະລິມານວຽກທີ່ມີຢູ່ ຫຼື ປະເພດຂອງວຽກທີ່ເຂົາເຈົ້າກຳລັງເຮັດຢູ່. ໃນຄວາມຄິດແບບທົ່ວໄປ ເຫັນວ່າເຂົາເຈົ້າ 'ຖືກສັບຊ້ອນໃຫ້ເຮັດຜິດວຽກ' ຫຼາຍກວ່າຈະແມ່ນການຫວ່າງງານ. ຄວາມສຳຄັນຂອງຄຳຖາມຂໍ້ນີ້ແມ່ນເກີດມາຈາກຄວາມຈິງທີ່ວ່າ ຖ້າແຮງງານເຫຼົ່ານີ້ ໄດ້ເຮັດວຽກໃນລະດັບຄວາມສາມາດຕ່າງເກົ່າ, ລະດັບຄວາມເພິ່ງພໍໃຈ ແລະ ປະສິດທິຜົນຂອງວຽກອາດຈະເພີ່ມຂຶ້ນ.

ການສຳຫຼວດນີ້ໄດ້ວາງຄຳຖາມແບບກົງໄປກົງມາກັບແຮງງານວ່າ: ເຈົ້າຕ້ອງການວຽກເພີ່ມ ຫຼື ຕ້ອງການເຮັດວຽກອື່ນທີ່ແຕກຕ່າງຈາກວຽກທີ່ເຮັດຢູ່ໃນເວລານີ້ບໍ່? ຜົນການສຳຫຼວດສະແດງໃຫ້ເຫັນວ່າ ປະມານ 56% ຂອງແຮງງານຕອບວ່າ: ແມ່ນແລ້ວ, ເຂົາເຈົ້າຕ້ອງການໜຶ່ງວຽກ ຫຼື ທັງສອງວຽກ. ຜູ້ທີ່ຕ້ອງການວຽກເພີ່ມ ຫຼື ຕ້ອງການປ່ຽນໄປເຮັດວຽກທີ່ແຕກຕ່າງຈາກທີ່ເຮັດຢູ່ແມ່ນແຮງງານເພດຊາຍຫຼາຍກວ່າເພດຍິງ, ຜູ້ໜຸ່ມຫຼາຍກວ່າຜູ້ເຖົ້າ ແລະ ຜູ້ທີ່ມີລາຍຮັບຕໍ່າ ຫຼາຍກວ່າຜູ້ທີ່ມີລາຍຮັບສູງກວ່າ ໂດຍບໍ່ກ່ຽວກັບວ່າບາງຄົນໄດ້ເຮັດວຽກເຕັມເວລາກໍ່ບົ່ງບອກໃຫ້ເຫັນວ່າແຮງງານເຫຼົ່ານີ້ເຮັດວຽກບໍ່ເຕັມສ່ວນ ຫຼື ເຮັດຜິດວຽກ, ຫຼື ທັງສອງຢ່າງ. ບາງຄົນອາດ ສະແດງຄວາມຮູ້ສຶກຫງຸດຫງິດອອກມາໃຫ້ເຫັນຊັດເຈນຍ້ອນຄວາມຕ້ອງການ ລາຍຮັບເປັນເງິນສົດຫຼາຍຂຶ້ນ ໂດຍທີ່ວຽກພວກເຂົາເຮັດໃນປະຈຸບັນບໍ່ສາມາດຕອບສະໜອງໄດ້.

65 ເບິ່ງ Raj Krishna (1976) ສຳຫຼັບແນວຄິດກ່ຽວກັບ 'ການເຮັດຜິດວຽກ'. Morris ແລະ Bruun (2005) ແລະ ບົດລາຍງານ NHDR ປີ 2007 ຂອງມົງໂກລີ ໄດ້ຊີ້ໃຫ້ເຫັນຕົວຢ່າງຂອງການຈ້າງແຮງງານຜິດວຽກ ຢູ່ເສດຖະກິດຂ້າມຜ່ານຂອງມົງໂກລີ.

**ກ່ອງ 4.7: ການຫວ່າງງານໃນກຸ່ມຜູ້ຄອບຄອງທີ່ດິນຂະໜາດນ້ອຍ**

ຂ້ອຍມີດິນພຽງແຕ່ 0.5 ເຮັກຕາ. ບໍ່ມີຊົນລະປະທານ, ດັ່ງນັ້ນຈຶ່ງປູກພືດໄດ້ຊະນິດດຽວ. ຄອບຄົວຂ້ອຍເປັນ ຄອບຄົວໃຫຍ່, ໃນນັ້ນມີຂ້ອຍ, ເມຍ ແລະ ລູກ 5 ຄົນ. ລູກສາວກົກຂອງຂ້ອຍສອງຄົນເລີ່ມເຮັດວຽກໄດ້ແລ້ວ, ແຕ່ວ່າຄົນອື່ນໆຍັງໄປໂຮງຮຽນ ແລະ ຍັງນ້ອຍຢູ່. ເມຍຂອງຂ້ອຍສຸຂະພາບບໍ່ດີ. ດັ່ງນັ້ນ, ພວກຂ້ອຍຕ້ອງການເງິນເພີ່ມເພື່ອມາປິ່ນປົວລາວ.

ໃນລະດູແລ້ງ, ຂ້ອຍຫາປາ ຫຼື ເຮັດວຽກຮັບຈ້າງອື່ນໆ. ໃນລະດູຝົນ, ຂ້ອຍເຮັດນາ. ມີບາງຄັ້ງໃນລະດູຝົນກໍ່ບໍ່ມີວຽກເຮັດກັບດິນຕອນນີ້. ຂ້ອຍກັບລູກສາວໄປຫຼົກຫຍ້າ ແລະ ຄົນອື່ນໆກໍ່ເຮັດວຽກຢູ່ໃນທົ່ງນາ. ຫຼັງຈາກນັ້ນ,ພວກຂ້ອຍກໍ່ມີແຕ່ລໍຖ້າເກັບກ່ຽວ. ໃນໄລຍະນີ້, ຂ້ອຍພະຍາຍາມຊອກເຮັດວຽກຮັບຈ້າງ. ບາງຄັ້ງກໍ່ໄດ້ວຽກຂົນເຄື່ອງຂຶ້ນລົດບັນທຸກ ຫຼື ເຮັດວຽກຢູ່ເຂດກໍ່ສ້າງ. ບາງຄັ້ງ, ຂ້ອຍກໍ່ບໍ່ໄດ້ວຽກຫຍັງເຮັດເລີຍ. ຂ້ອຍຄິດຢາກອອກໄປເຮັດວຽກນອກບ້ານ ແຕ່ກໍ່ເປັນໄປບໍ່ໄດ້ ເພາະວ່າຄອບຄົວຂອງຂ້ອຍຢູ່ທີ່ນີ້ ແລະ ເມຍຂອງຂ້ອຍກໍ່ບໍ່ສາມາດເບິ່ງແຍງເຮືອນຊານໄດ້ດ້ວຍຕົນເອງຕາມລໍາພັງແຕ່ຜູ້ດຽວ. ຂ້ອຍຍັງຕ້ອງໄດ້ເບິ່ງແຍງນາອີກ. ດັ່ງນັ້ນ, ແມ່ນແຕ່ຢູ່ໃນລະດູຝົນກໍ່ຕາມເວລາຂ້ອຍບໍ່ມີວຽກເຮັດຂ້ອຍຍັງມີຄວາມກົດດັນຫຼາຍ.

***ຄອບຄົວຜູ້ຄອບຄອງດິນຂະໜາດນ້ອຍ, ບ້ານ ຕົນແກ້ວ, ເມືອງ ຊຽງເງິນ, ແຂວງ ຫຼວງພະບາງ, ການສໍາຫຼວດ ພາກສະໜາມ:*** *ເດືອນກຸມພາ ປີ 2008*

**ຮູບສະແດງ 4.8: ການວັດແທກການຫວ່າງງານຕາມຫຼັກເກນຕ່າງໆ**




## ຫຼັກເກນຕ່າງໆທີ່ເປັນທາງເລືອກໃນການວັດແທກການຫວ່າງງານ

ໃນປະເທດກະສິກໍາທີ່ມີລາຍຮັບຕໍ່າ ສ່ວນໃຫຍ່ ຕົວເລກການຫວ່າງງານ ແມ່ນມີຕໍ່າເມື່ອທຽບໃສ່ຕົວເລກຄວາມທຸກຍາກ, ບໍ່ວ່າຈະນໍາໃຊ້ວິທີໃດກໍ່ຕາມເພື່ອມາວັດແທກຕົວເລກດັ່ງກ່າວ ຍ້ອນວ່າແຮງງານຈໍານວນຫຼາຍມີລາຍຮັບຕໍ່າເຖິງແມ່ນວ່າຈະເຮັດວຽກເຕັມເວລາກໍ່ຕາມ ເຊັ່ນ: ຄົນທຸກຍາກເຮັດວຽກ. ບາງຄັ້ງເຂົາເຈົ້າເຮັດວຽກໃນບ່ອນທີ່ມີຜົນຕອບແທນຕໍ່າໃນຂະນະທີ່ຢູ່ບ່ອນອື່ນຕະຫຼາດແຮງງານກໍ່ຖືກເອົາລັດເອົາປຽບ. ຄວາມເປັນຈິງອີກອັນໜຶ່ງ ແມ່ນການເຮັດຜິດວຽກ ຫຼື ເຮັດວຽກບໍ່ສອດຄ່ອງກັບຄວາມຮູ້ຂອງຕົນເອງ ຊຶ່ງໝາຍເຖິງການທີ່ແຮງງານເຮັດວຽກບໍ່ໄດ້ໃຊ້ທັກສະສີມືຫຼືຄວາມສາມາດທີ່ມີ ຫຼື ໃຊ້ໜ້ອຍ (ຊຶ່ງຍັງເຮັດໃຫ້ໄດ້ຮັບຄ່າຈ້າງຕໍ່າກວ່າທີ່ເຂົາເຈົ້າຄວນຈະໄດ້). ຫຼາຍຄັ້ງ ກໍ່ມີການເຫຼື່ອມລໍ້າກັນລະຫວ່າງຄົນທຸກຍາກ, ຄົນຫວ່າງງານ, ຜູ້ທີ່ເຮັດຜິດວຽກ ແລະ ອື່ນໆ. ເອກະສານສໍາຄັນ ດ້ານການພັດທະນາ ໄດ້ພະຍາຍາມຊອກວິທີແກ້ໄຂບັນຫາທີ່ຊັບຊ້ອນເຫຼົ່ານີ້ ໂດຍພະຍາຍາມ ໄຈ້ແຍກແຕ່ລະບັນຫາໃນດ້ານຕ່າງໆ. ຮູບສະແດງ 4.8 ສະແດງໃຫ້ເຫັນ ເຖິງຄວາມພະຍາຍາມດັ່ງກ່າວ, ໂດຍໄດ້ສະແດງບັນຫາເຫຼົ່ານີ້ ເປັນແຜນວາດຂອງສາມປະເພດການຫວ່າງງານ ທີ່ຊໍ້າຊ້ອນກັນ:

*ການຫວ່າງງານວັດແທກຕາມເກນເວລາ:* ຖ້າເວລາມາດຕະຖານປົກກະຕິແມ່ນ X ຊົ່ວໂມງຕໍ່ອາທິດ, ຜູ້ທີ່ເຮັດວຽກຕໍ່າກວ່າ X ຊົ່ວໂມງຈະຖືກນັບເຂົ້າຢູ່ໃນກຸ່ມນີ້, ໂດຍຖືເອົາ U ແທນໃຫ້ກຸ່ມເຮັດວຽກຕໍ່າກວ່າ X ຊົ່ວໂມງຕາມຮູບສະແດງ 4.8.

*ການຈ້າງງານທີ່ມີລາຍຮັບຕໍ່າ:* ຖ້າແຮງງານໄດ້ຮັບຜົນຕອບແທນຕໍ່າກວ່າອັດຕາຕໍ່າສຸດ, ແຮງງານນັ້ນຈະຖືກນັບເຂົ້າໃນກຸ່ມນີ້ ໂດຍໃຫ້ LI ເປັນຕົວແທນຂອງກຸ່ມແຮງງານໄດ້ຮັບຄ່າຕອບແທນຕໍ່າກວ່າອັດຕາຕໍ່າສຸດຕາມຮູບສະແດງ 4.8.

*ການເຮັດຜິດວຽກ ຫຼື ເຮັດວຽກບໍ່ຖືກກັບວິຊາສະເພາະ:* ຖ້າແຮງງານຜູ້ໃດມີຄວາມຕ້ອງການຢາກເຮັດວຽກທີ່ແຕກຕ່າງອອກໄປຈາກວຽກປະຈໍາຂອງຕົນເອງ ຫຼື ຢາກເຮັດວຽກຕື່ມແມ່ນຈະນັບເຂົ້າໃນກຸ່ມນີ້ ຊຶ່ງສະແດງດ້ວຍສັນຍາລັກ W ຢູ່ຮູບສະແດງ 4.8.

ແຮງງານຢູ່ໃນກຸ່ມ 'LI ແຕ່ບໍ່ແມ່ນ U ຫຼື W', 'W ແຕ່ບໍ່ແມ່ນ LI ຫຼື U' ແລະ 'U ແຕ່ບໍ່ແມ່ນ LI ຫຼື W' ຢູ່ໃນຮູບສະແດງແມ່ນໄດ້ຮັບຜົນກະທົບຈາກບັນຫາດຽວ ຂອງບັນຫາກ່ຽວຂ້ອງກັບ ການຈ້າງງານ (ຄວາມເສຍປຽບ ດ້ານດຽວ)-ໝາຍວ່າກຸ່ມດັ່ງກ່າວ ບໍ່ຖືກກະທົບຈາກສອງໃນສາມບັນຫາທີ່ມີ. ແຮງງານຢູ່ໃນກຸ່ມ 'LI ແລະ U', 'LI ແລະ W' ແລະ 'U ແລະ W', ແຕ່ລະກຸ່ມຖືກກະທົບຈາກ ສອງໃນສາມບັນຫາ (ຄວາມເສຍປຽບສອງດ້ານ). ສະຫຼຸບແລ້ວ, ແຮງງານທີ່ຢູ່ໃນກຸ່ມ 'LI ແລະ U ແລະ W' ຖືກກະທົບຈາກບັນຫາທັງໝົດ (ຄວາມເສຍ ປຽບສາມດ້ານ); ເຂົາເຈົ້າຫວ່າງງານ, ທຸກຍາກ ແລະ ຢາກເຮັດວຽກຕື່ມອີກ. ເຖິງວ່າການຈັດແບ່ງດັ່ງກ່າວຈະ ສັບສົນກໍ່ຕາມ, ແຕ່ກໍ່ເຮັດໃຫ້ສາມາດກໍານົດກຸ່ມເປົ້າໝາຍ ທີ່ມີຄວາມຕ້ອງການໄດ້ຮັບການແກ້ໄຂບັນຫາຫຼາຍ ທີ່ສຸດ - 'LI ແລະ Uແລະ W' ແມ່ນກຸ່ມເປົ້າໝາຍທີ່ຕ້ອງການໃຫ້ແກ້ໄຂບັນຫາຫຼາຍທີ່ສຸດ.

ເພື່ອໃຫ້ສາມາດວັດແທກແນວຄວາມຄິດເຫຼົ່ານີ້ ໃນທາງປະຕິບັດແລ້ວບໍ່ແມ່ນເລື່ອງງ່າຍ. ເຖິງຢ່າງໃດກໍ່ຕາມ, ການຄົ້ນຄວ້ານີ້ ໄດ້ມີຄວາມພະຍາຍາມຮວບຮວມຂໍ້ມູນຂ່າວສານເທົ່າທີ່ຈະສະໜອງໄດ້. ກຸ່ມ LI ປະ ກອບດ້ວຍແຮງງານໃນກຸ່ມລາຍຮັບຕໍ່າສຸດ (25%), ກຸ່ມ

**ກ່ອງ 4.8: ການຫວ່າງງານ ແລະ ເວລາຫວ່າງ – ບາງທັດສະນະຈາກການສຳຫຼວດພາກສະໜາມ**

ໃນໄລຍະຜ່ານມາ, ປະຊາຊົນດຳລົງຊີວິດຢູ່ໂດຍອາໄສທີ່ດິນ, ປ່າໄມ້ ແລະ ຊັບພະຍາກອນທຳມະຊາດ. ມາດຕະຖານການດຳລົງຊີວິດອາດບໍ່ສູງ, ແຕ່ຄວາມຈິງແລ້ວກໍ່ຢູ່ໃນລະດັບປານກາງຖ້າເບິ່ງຈາກລະດັບຊີວິດການເປັນຢູ່ຂອງເຂົາເຈົ້າໃນປະຈຸບັນ. ເຖິງແມ່ນວ່າປະຊາຊົນຈະເຮັດວຽກຫຼາຍປະເພດກໍ່ຕາມ, ແຕ່ເຂົາເຈົ້າກໍ່ຍັງມີເວລາພັກຜ່ອນຫຼາຍສົມຄວນ. ການທີ່ເຂົາເຈົ້າບໍ່ຕ້ອງການເອົາເວລາພັກຜ່ອນໄປເປັນເວລາເຮັດວຽກກໍ່ຍ້ອນວ່າເວລາພັກຜ່ອນດັ່ງກ່າວມີຄຸນຄ່າສຳລັບເຂົາເຈົ້າ. ສະນັ້ນ, ໃນປະຈຸບັນມີການປ່ຽນແປງຫຍັງເກີດຂຶ້ນ?

*ດ້ານໜຶ່ງ,* ການຫັນໄປສູ່ຄວາມທັນສະໄໝໄດ້ນຳເອົາປະໂຫຍດຫຼາຍຢ່າງເຂົ້າມາ ຊຶ່ງເຮັດໃຫ້ປະຊາຊົນເກີດມີຄວາມຕ້ອງການຊົມໃຊ້ຜະລິດຕະພັນໃໝ່ໆຫຼາຍຢ່າງຈາກພາຍນອກ. ແຕ່ກ່ອນພວກເຮົາ ບໍ່ໄດ້ຊົມໃຊ້ສິນຄ້າເຫຼົ່ານີ້, ແຕ່ດຽວນີ້ພວກເຮົາໄດ້ຊົມໃຊ້ ເຖິງວ່າຈະບໍ່ໄດ້ຜະລິດເອງກໍ່ຕາມ. ດັ່ງນັ້ນ, ພວກເຮົາຕ້ອງໄດ້ສ້າງລາຍຮັບເພີ່ມ ຊຶ່ງແຕ່ກ່ອນບໍ່ເຮັດກໍ່ໄດ້. ດ້ວຍເຫດນີ້, ຈຶ່ງຕ້ອງຫຼຸດເວລາພັກຜ່ອນຂອງພວກເຮົາລົງ.

*ດ້ານສອງ,* ການຫັນເປັນກຳມະສິດເອກະຊົນ ແລະ ການເຊື່ອມໂຊມລົງຂອງຊັບສິນສາທາລະນະ ແລະ ປ່າໄມ້ ໄດ້ເຮັດໃຫ້ແຫຼ່ງລາຍຮັບບາງແຫຼ່ງຂອງພວກເຮົາຫຼຸດລົງ. ແນ່ນອນ, ລາຍຮັບຈາກການຜະລິດກະສິກຳເພີ່ມຂຶ້ນຢ່າງຫຼວງຫຼາຍ, ແຕ່ວ່າເພື່ອເຮັດໃຫ້ໄດ້ແນວນັ້ນກໍ່ຕ້ອງການປັດໄຈການຜະລິດທີ່ບໍ່ໄດ້ຜະລິດຢູ່ພາຍໃນປະເທດຫຼາຍຂຶ້ນ ເຊັ່ນ: ຝຸ່ນວິທະຍາສາດ. ດັ່ງນັ້ນ, ນອກຈາກຄວາມຕ້ອງການລາຍຮັບເປັນເງິນສົດເພື່ອຊື້ສິນຄ້າບໍລິໂພກ ແລະ ທົດແທນໃຫ້ແກ່ຜະລິດຕະພັນຈາກປ່າໄມ້ທີ່ສູນເສຍໄປແລ້ວ ກໍ່ຍັງມີຄວາມຕ້ອງການເງິນເພື່ອຊື້ ປັດໄຈການຜະລິດທາງດ້ານກະສິກຳອີກ ເຊັ່ນ: ນ້ຳມັນກາຊວນໃສ່ລົດໄຖນາ, ຝຸ່ນວິ ທະຍາສາດ ແລະ ອຸປະກອນຂົນສົ່ງຕ່າງໆ. ອັນນີ້ແມ່ນສິ່ງທີ່ເກີດຂຶ້ນ ເນື່ອງຈາກວ່າປະຈຸບັນ ພວກເຮົາມີສັດລາກແກ່ໜ້ອຍຍ້ອນວ່າ ພວກເຮົາຫັນມານຳໃຊ້ລົດໄຖນາແທນ.

*ດ້ານສາມ,* ຄ່າໃຊ້ຈ່າຍດ້ານສຸຂະພາບໃນຄອບຄົວໄດ້ເພີ່ມຂຶ້ນສູງ. ຄວາມຕ້ອງການຢາກມີອາຍຸຍືນ ແລະ ການປິ່ນປົວຜູ້ທີ່ເຈັບເປັນແມ່ນເຫດຜົນສຳຄັນ. ສິ່ງທີ່ກ່າວມານີ້ສະທ້ອນໃຫ້ເຫັນເຖິງການແຊກຊຶມເຂົ້າມາຂອງ ຄ່ານິຍົມຂອງຍຸກສະໄໝໃໝ່. ເຖິງວ່າລັດຖະບານໄດ້ສະໜອງຖົງຢາໃຫ້ແກ່ບ້ານຂອງພວກເຮົາກໍ່ຕາມ, ແຕ່ກບໍ່ສາມາດທົດແທນທ່ານໝໍໄດ້. ດັ່ງນັ້ນ, ພວກເຮົາຈຶ່ງຕ້ອງໄດ້ໃຊ້ຈ່າຍເງິນເພື່ອສຸຂະພາບ.

*ດ້ານສີ່,* ເມື່ອຊັບສິນສາທາລະນະໝົດໄປ ຫຼື ມີໜ້ອຍລົງ, ສັດລ້ຽງກໍ່ມີຈຳນວນໜ້ອຍລົງ. ໃນເວລາດຽວກັນ, ພວກເຮົາກໍ່ຕ້ອງໄດ້ຊື້ຊີ້ນກິນ ເພາະວ່າຊີ້ນເປັນແຫຼ່ງໂປຣຕີນສຳຄັນສຳລັບບຳລຸງຮ່າງກາຍ. ດັ່ງນັ້ນ, ຈຶ່ງຈຳເປັນຕ້ອງໃຊ້ເງິນ.

ແຕ່ກ່ອນ ພວກເຮົາມີເວລາຫວ່າງຫຼາຍ ຊຶ່ງພວກເຮົາບໍ່ສາມາດຈະຖືເປັນຂອງ 'ໄດ້ລ້າ' ອີກຕໍ່ໄປ. ພວກເຮົາຕ້ອງ ການເງິນ. ດັ່ງນັ້ນ ເມື່ອທ່ານຖາມພວກເຮົາວ່າພວກເຮົາຫວ່າງງານ ຫຼື ບໍ່, ບາງທີຢູ່ໃນຍຸກອື່ນ (ຍຸກກ່ອນ) ພວກເຮົາອາດຕອບວ່າ 'ບໍ່, ແຕ່ພວກເຮົາມີເວລາຫວ່າງເພື່ອພັກຜ່ອນຫຼາຍ'. ແຕ່ວ່າໃນປະຈຸບັນ, ພວກເຮົາຖື 'ເວລາຫວ່າງ' ຂອງພວກເຮົາດັ່ງກ່າວຄືກັບ 'ການຢູ່ລ້າໆແບບບໍ່ສະໝັກໃຈ', ຊຶ່ງກໍ່ໝາຍຄວາມວ່າການຫວ່າງງານ. 'ການຢູ່ລ້າໆ' ໃນປະຈຸບັນແມ່ນການຫວ່າງງານ.

ພວກເຮົາບໍ່ໄດ້ຕໍ່ຕ້ານການຫັນໄປສູ່ຄວາມທັນສະໄໝ ຫຼື ພະຍາຍາມຈະເວົ້າວ່າ ອະດີດດີກວ່າປະຈຸບັນ. ສິ່ງທີ່ພວກເຮົາເວົ້າມາທັງໝົດນີ້ໝາຍຄວາມວ່າເວລາໄດ້ປ່ຽນແປງໄປ, ແຕ່ພວກເຮົາປັບຕົວໃຫ້ເຂົ້າກັບສະພາບໄດ້ຊ້າ ແລະ ມີການກຽມຕົວສຳລັບການປ່ຽນແປງກໍ່ຄືວິວັດທະນາການດັ່ງກ່າວໄດ້ຊ້າກວ່າ.

ໃຈຄວາມສຳຄັນຂອງການສົນທະນາໂອ້ລົມກັບເຖົ້າແກ່ຂອງບ້ານ ແລະ ນາຍບ້ານບ້ານທາລີ,
ເມືອງນານ, ແຂວງ ຫຼວງພະບາງ, ການສຳຫຼວດພາກສະໜາມ: ເດືອນກັນຍາ-ຕຸລາ ປີ 2007

W ປະກອບດ້ວຍແຮງງານທີ່ຢາກເຮັດວຽກຫຼາຍຂຶ້ນ ຫຼື ເຮັດວຽກທີ່ແຕກຕ່າງ (56%) ແລະ ກຸ່ມ U ປະກອບດ້ວຍແຮງງານທີ່ປະສົບກັບສະພາບການຫວ່າງງານໃນບາງເວລາໃນອາທິດໃດໜຶ່ງທີ່ກຳນົດໃນລະດູຝົນ(24%).ຕາຕະລາງ4.6ສະແດງອັດຕາສ່ວນແຮງງານໃນແຕ່ລະກຸ່ມຂອງເຈັດກຸ່ມໃນຮູບສະແດງ 4.8:

ມີແຮງງານເຖິງ 71% ຫວ່າງງານ ຫຼື ມີລາຍຮັບຕ່ຳ ຫຼື ບໍ່ພໍໃຈກັບວຽກຂອງເຂົາເຈົ້າ (ແລະ ມີຄວາມຕ້ອງການຢາກເຮັດວຽກຕື່ມ ຫຼື ເຮັດວຽກທີ່ແຕກຕ່າງອອກໄປ). ແຮງງານໃນກຸ່ມທີ່ມີຄວາມສ່ຽງທີ່ສຸດແມ່ນຢູ່ໃນກຸ່ມ (LI, W&U), ຊຶ່ງມີປະມານ 5.2% ຂອງແຮງງານທັງໝົດ(ແຖວທີ1,ຕາຕະລາງ4.7).ຕໍ່ມາແມ່ນແຮງງານໃນກຸ່ມ (LI&U), (LI&W) ແລະ (W&U) (ແຖວ 2, 3 ແລະ 4). ສາມກຸ່ມນີ້ລວມກັນມີປະມານ 22% ຂອງແຮງງານທັງໝົດ. ກຸ່ມທີ່ມີຄວາມສ່ຽງໜ້ອຍທີ່ສຸດແມ່ນກຸ່ມ (LI, ແຕ່ບໍ່ແມ່ນ U ຫຼື W), ກຸ່ມ (W, ແຕ່ບໍ່ແມ່ນ LI ຫຼື U) ແລະ ກຸ່ມ (U, ແຕ່ບໍ່ແມ່ນ LI ຫຼື W) (ແຖວທີ 5, 6 ແລະ 7) ຊຶ່ງລວມກັນເປັນ 44% ຂອງແຮງງານທັງໝົດ. ການສຶກສາວິໄຈທັງໝົດທີ່ເຮັດມານີ້ ຊີ້ໃຫ້ເຫັນຄວາມຈິງທີ່ວ່າການຫວ່າງງານກໍ່ຄືຄວາມທຸກຍາກແມ່ນບັນຫາທີ່ມີຫຼາຍແງ່ມຸມ. ດັ່ງນັ້ນ, ຈຶ່ງມີຄວາມເປັນໄປໄດ້ທີ່ຈະໃຫ້ຄະແນນກຸ່ມທີ່ຫວ່າງງານໂດຍເບິ່ງຈາກລະດັບ ຫຼື ຂະໜາດຂອງຄວາມບໍ່ເຂັ້ມແຂງທາງດ້ານເສດຖະກິດສັງຄົມຂອງເຂົາເຈົ້າ; ຊຶ່ງຈະສາມາດຊ່ວຍຈັດສັນຊັບ ພະຍາກອນທີ່ມີຈຳກັດໄປໃຫ້ຜູ້ທີ່ມີຄວາມຕ້ອງການຫຼາຍທີ່ສຸດ.

ການຫວ່າງງານໃນເສດຖະກິດຂອງປະເທດທີ່ມີລາຍຮັບຕ່ຳຮຽກຮ້ອງໃຫ້ມີການເຂົ້າໄປແກ້ໄຂຫຼາຍໆບັນຫາພ້ອມໆກັນເຊັ່ນ: ການສ້າງຄວາມທັນສະໄໝທາງດ້ານກະສິກຳ, ການສົ່ງເສີມການຜະລິດທີ່ເຂັ້ມງານຢູ່ນອກຂະແໜງກະສິກຳ ແລະ ນອກລະດູການກະສິກຳ ແລະ ການເຂົ້າໄປແກ້ໄຂໂດຍກົງໃນຕະຫຼາດແຮງງານ.

**ກ່ອງ 4.9: ແຜນງານຮອງຮັບດ້ານການຈ້າງງານສໍາລັບການຫວ່າງງານຕາມລະດູການ**

ແຜນງານແຫ່ງລັດກ່ຽວກັບການຈ້າງງານສາທາລະນະ ແມ່ນໄດ້ລິເລີ່ມຂຶ້ນ ເພື່ອຮັບໃຊ້ສອງຈຸດປະສົງຄຽງຄູ່ກັນ ໄປຄື: ເພື່ອຊ່ວຍຫຼຸດຜ່ອນ ຫຼື ແບ່ງເບົາສະພາບການຫວ່າງງານ/ການເຮັດວຽກຕໍ່າກວ່າມາດຕະຖານເວລາ (ແລະ ຄວາມທຸກຍາກ) ແລະ ເພື່ອສ້າງຊັບສິນ ແລະ ການບໍລິການທີ່ມີປະສິດທິຜົນຢູ່ໃນເສດຖະກິດຊົນນະບົດ. ເຖິງແມ່ນວ່າແຜນງານດັ່ງກ່າວນີ້ ຈະແມ່ນຮູບແບບການຊ່ວຍເຫຼືອທາງສັງຄົມກໍ່ຕາມ, ແຕ່ແຮງງານຈະບໍ່ເສຍກຽດ ແລະ ຊື່ສຽງຂອງຕົນ. ໃນທາງກົງກັນຂ້າມ, ເຂົາເຈົ້າຈະມີຄວາມເຂັ້ມແຂງຂຶ້ນເພາະວ່າເຂົາເຈົ້າໄດ້ຮັບຄ່າຈ້າງ. ບາງລັກສະນະຂອງແຜນງານຄ້າຍຄືກັນທີ່ພົ້ນເດັ່ນຢູ່ປະເທດອື່ນມີດັ່ງລຸ່ມນີ້:

1. ອໍານາດການປົກຄອງທ້ອງຖິ່ນລິເລີ່ມແຜນງານກໍ່ສ້າງເພື່ອສ້າງຊັບສິນທ້ອງຖິ່ນເຊັ່ນ: ຮ່ອງລະບາຍນໍ້າ, ເສັ້ນທາງທ້ອງຖິ່ນ, ອ່າງເກັບນໍ້າ, ຊົນລະປະທານ, ຄອງເໝືອງ ແລະ ປູກຕົ້ນໄມ້ ຊຶ່ງແມ່ນສ່ວນໜຶ່ງຂອງແຜນງານ. ຍັງມີແຜນຜັງໂຄງຮ່າງສະເພາະຂອງໂຄງການທີ່ມີຄວາມໝາຍທາງດ້ານເສດຖະກິດແລະ ສັງຄົມທີ່ໄດ້ ກະກຽມໄວ້ສໍາລັບແຕ່ລະຂົງເຂດຕາມລັກສະນະທີ່ຕັ້ງ. ການເຮັດວຽກໃນໂຄງການໄດ້ສະ ໜອງວຽກເຮັດງານທໍາໃຫ້ຜູ້ອອກແຮງງານໃນໄລຍະເວລາອັນສັ້ນ.
2. ແຮງງານ (ທ້ອງຖິ່ນ) ທີ່ຊອກຫາວຽກເຮັດງານທໍາຈະຖືກຈ້າງເຂົ້າໃນໂຄງການເຫຼົ່ານີ້ຫຼາຍເທົ່າທີ່ຈະຫຼາຍໄດ້.
3. ຈະດໍາເນີນແຕ່ສະເພາະໂຄງການທີ່ໃຊ້ແຮງງານເປັນຫຼັກ ແລະ ຕ້ອງການແຮງງານທີ່ມີທັກສະສີມືຕໍ່າ ຫຼື ບໍ່ມີສີມືເທົ່າທີ່ຈະເຮັດໄດ້. ວິທີນີ້ ກໍ່ແມ່ນທາງໜຶ່ງອີກ ເພື່ອຮັບປະກັນກຸ່ມເປົ້າໝາຍແທນທີ່ວ່າຈະຮັກສາຄ່າຈ້າງໃຫ້ຢູ່ໃນລະດັບຕໍ່າສຸດຕາມທີ່ໄດ້ຕັ້ງໄວ້.
4. ບ້ານ (ຫຼືກຸ່ມບ້ານ) ມີຫ້ອງການທີ່ຜູ້ອອກແຮງງານທີ່ຄາດວ່າຈະມາເຮັດວຽກໄດ້ສາມາດມາຈົດທະບຽນໃນລັກສະນະຖາວອນໄດ້. ການຈົດທະບຽນ ບໍ່ໄດ້ໝາຍຄວາມວ່າ ແຮງງານເຫຼົ່ານັ້ນຕ້ອງໄດ້ເຮັດວຽກ-ເຂົາເຈົ້າຈະເຮັດວຽກກໍ່ຕໍ່ເມື່ອເຂົາເຈົ້າມີຄວາມຕ້ອງການຢາກເຮັດ, ແຕ່ການຈົດທະບຽນຈະຊ່ວຍໃຫ້ສາມາດກໍານົດໄດ້ ຈໍານວນແຮງງານທ້ອງຖິ່ນທີ່ມີຫຼາຍກວ່າຄວາມຕ້ອງການ ແລະ ເຮັດໃຫ້ສາມາດວາງແຜນອອກແບບໂຄງການ ສໍາລັບພື້ນທີ່ດັ່ງກ່າວໄດ້.
5. ເມື່ອແຮງງານເຫຼົ່ານັ້ນຕ້ອງການເຮັດວຽກ, ເຂົາເຈົ້າຈະໄປຫາຫ້ອງການດັ່ງກ່າວ ແລະ ຖາມຫາວຽກເຮັດ.
6. ການສ້າງວຽກເຮັດຢູ່ບ່ອນໃໝ່ກໍ່ເກີດຂຶ້ນໄດ້ຕາມຄວາມຕ້ອງການຂອງແຮງງານ ຖ້າຫາກວ່າມີຈໍານວນແຮງງານຕໍ່າສຸດຕາມເກນທີ່ກໍານົດໄວ້ (ຊຶ່ງພຽງພໍສໍາລັບຄວາມຕ້ອງການຂອງໂຄງການໃໝ່) ມີຄວາມຕ້ອງການ ຢາກເຮັດວຽກໃນເວລາດຽວກັນ. ຖ້າຫາກວ່າມີຈໍານວນວຽກງານບໍ່ພຽງພໍກັບແຮງງານ, ແຮງງານເຫຼົ່ານັ້ນກໍ່ຈະຖືກສົ່ງໄປເຮັດວຽກຢູ່ໃນບ່ອນທີ່ກໍາລັງມີການເຮັດວຽກຢູ່ໃນຂອບເຂດປະມານ 2-3 ກິໂລແມດ.
7. ການເຮັດວຽກຈະບໍ່ຕໍ່ເນື່ອງຖ້າຫາກວ່າແຮງງານຖອນໂຕອອກ; ວຽກດັ່ງກ່າວຈະເລີ່ມໃໝ່ເມື່ອແຮງງານເຫຼົ່າ ນັ້ນຕ້ອງການເຮັດວຽກອີກ. ໃນກໍລະນີສະເພາະ, ເມື່ອໂຄງການໄດ້ເລີ່ມປະຕິບັດແລ້ວຕ້ອງເຮັດໃຫ້ສໍາເລັດເພື່ອບໍ່ໃຫ້ໂຄງການຫຼົ້ມເລວ. ໃນກໍລະນີດັ່ງກ່າວ ຈະມີການຈ້າງແຮງງານເພີ່ມເພື່ອເຮັດໃຫ້ໂຄງການສໍາເລັດ.
8. ຈະມີການກະກຽມແຜນການຈ່າຍຄ່າແຮງຕາມໜ້າວຽກ (ພ້ອມກັບແຜນສໍາຮອງ), ໝາຍຄວາມວ່າຄ່າແຮງ ງານຈະຈ່າຍໄປຕາມຈໍານວນວຽກທີ່ເຮັດສໍາເລັດ. ໃນກໍລະນີທີ່ແຮງງານບໍ່ສາມາດເຮັດວຽກສໍາເລັດພຽງພໍເພື່ອໃຫ້ໄດ້ຄ່າແຮງຕໍ່າສຸດ, ເຂົາເຈົ້າກໍ່ຈະໄດ້ຮັບການຈ່າຍຄ່າແຮງຢ່າງໜ້ອຍຕາມອັດຕາຕໍ່າສຸດດັ່ງກ່າວ.

ຮູບແບບທີ່ສະເໜີມາທັງໝົດນີ້ ແມ່ນເປັນການ 'ສ້າງວຽກເຮັດງານທໍາ' ທີ່ເປັນຄຸນລັກສະນະສໍາຄັນຂອງໂຄງການ, ທັງຍັງເປັນອົງປະກອບຕິດພັນທີ່ເຮັດໃຫ້ມີການສ້າງພື້ນຖານໂຄງລ່າງຂອງທ້ອງຖິ່ນນໍາ. ອົງປະກອບທີ່ ເພີ່ມເຂົ້າມານີ້ແມ່ນໄດ້ປະຕິບັດກັນຢູ່ໃນບາງປະເທດ ຊຶ່ງເປັນການສ້າງຂີດຄວາມສາມາດ ໃຫ້ແກ່ແຮງງານໂດຍການຮຽນຮູ້ຈາກການເຮັດວຽກຕົວຈິງ, ຕົວຢ່າງວ່າ ຖ້າແຮງງານຫາກໄດ້ເຮັດວຽກກໍ່ສ້າງໂຮງຮຽນ, ເຂົາເຈົ້າກໍ່ຈະມີຄວາມຮູ້ເພີ່ມຕື່ມດ້ານການກໍ່ສ້າງ. ຢູ່ບາງແຫ່ງໃນໂລກ, ພາກເອກະຊົນໄດ້ມີສ່ວນຮ່ວມ ແລະ ຊ່ວຍສະໜັບສະໜູນດ້ານການເງິນໃນດ້ານທີ່ກ່າວມານັ້ນ. ຍົກຕົວຢ່າງວ່າ ຖ້າຄົນງານຜູ້ໜຶ່ງມີສ່ວນຮ່ວມໃນການກໍ່ສ້າງ ເຄື່ອງເກັບສາງໃຫ້ພາກເອກະຊົນເພື່ອນໍາໃຊ້ໃນການເກັບຮັກສາສິນຄ້າ, ເຂົາເຈົ້າກໍ່ຄວນສາມາດປະກອບສ່ວນທຶນຮອນເຂົ້າໃນການກໍ່ສ້າງດັ່ງກ່າວ. ແຜນການໃນລັກສະນະນີ້ແມ່ນມີຫຼາຍຕົວແບບທີ່ດີ.

ນອກຈາກນີ້, ໃນການອອກແບບແຜນງານເຮັດວຽກ ກໍ່ຍັງປະກອບໄປດ້ວຍປັດໄຈຕ່າງໆ ທີ່ກ່ຽວພັນກັບຄົນເພືອນກັນ. ຍົກຕົວຢ່າງ: ສໍາລັບແຮງງານທີ່ມີລູກນ້ອຍ, ຈະມີການຈັດສັນໃຫ້ມີການລ້ຽງເດັກໂດຍຈະຂໍໃຫ້ແຮງງານຜູ້ໃດຜູ້ໜຶ່ງອາວຸໂສກວ່າມາເບິ່ງແຍງເດັກນ້ອຍ.

ເງື່ອນໄຂພື້ນຖານສີ່ປະການເພື່ອເຮັດໃຫ້ແຜນງານເຫຼົ່ານັ້ນປະສົບຜົນສໍາເລັດ:

1. ແຜນງານດັ່ງກ່າວຕ້ອງມີຄວາມສາມາດດັດປັບໄດ້ ຫຼື ສາມາດປັບປ່ຽນໄປຕາມສະພາບການໃນລະດັບທ້ອງຖິ່ນໄດ້ເພື່ອໃຫ້ສອດຄ່ອງກັບຄວາມຕ້ອງການ ແລະ ການຕອບສະໜອງວຽກງານ.
2. ແຜນງານນັ້ນຕ້ອງມີເປົ້າໝາຍແນໃສ່ຄົນທຸກຍາກ, ໝາຍຄວາມວ່າ ແຜນງານນັ້ນຈະດຶງດູດເອົາແຕ່ຜູ້ທີ່ມີຄວາມຕ້ອງການ ແລະ ຢາກເຮັດວຽກແທ້ໆ. ໃນດ້ານນີ້, ວຽກທີ່ເຮັດຄວນມີລັກສະນະປະຕິບັດຕົວຈິງ ແລະ ຄ່າແຮງງານຕໍ່າສຸດກໍ່ຕ້ອງຢູ່ໃນລະຫວ່າງ 10,000-15,000 ກີບຕໍ່ມື້ໃນເວລານີ້.
3. ສິ່ງສໍາຄັນແມ່ນຕ້ອງມີລະບົບການຕິດຕາມກວດກາ ແລະ ປະເມີນຜົນທີ່ດີ.
4. ຄວນນໍາເອົາວຽກທີ່ເປັນການສ້າງລະດັບຄວາມສາມາດ ໃຫ້ແກ່ແຮງງານ ເຂົ້າມາເປັນສ່ວນໜຶ່ງຂອງແຜນວຽກ.

***ແຫຼ່ງຂໍ້ມູນອ້າງອີງ:*** *Moreno-Dodson (2005); Devereux S ແລະ C Solomon (2005); ILO-Bappenas (2005); Acharya (1990); Ling ແລະ Zhongyi (1995); Acharya, Iyer ແລະ Basak (2005)*

**ຕາຕະລາງ 4.6: ຄາດຄະເນການຫວ່າງງານຕາມຫຼັກເກນຕ່າງໆ**

| | ປະເພດ | ຄໍາອະທິບາຍ | ອັດຕາສ່ວນແຮງງານທັງໝົດ |
|---|---|---|---|
| 1 | LI, W ແລະ U*** | ລາຍຮັບຕໍ່າ, ຢາກເຮັດວຽກຫຼາຍຂຶ້ນ ແລະ ຫວ່າງງານ | 5.2% |
| 2 | LI & U** | ລາຍຮັບຕໍ່າ ແລະ ຫວ່າງງານ | 2.5% |
| 3 | LI & W** | ລາຍຮັບຕໍ່າ ແລະ ຢາກເຮັດວຽກຫຼາຍຂຶ້ນ | 9.2% |
| 4 | W & U** | ຢາກເຮັດວຽກຫຼາຍຂຶ້ນ ແລະ ຫວ່າງງານ | 10.3% |
| 5 | LI, ບໍ່ແມ່ນ U ຫຼື W* | ລາຍຮັບຕໍ່າແຕ່ບໍ່ຫວ່າງງານ ແລະ ບໍ່ຢາກເຮັດວຽກຫຼາຍຂຶ້ນ | 7.5% |
| 6 | W, ບໍ່ແມ່ນ LI ຫຼື U* | ຢາກເຮັດວຽກຫຼາຍຂຶ້ນແຕ່ລາຍຮັບບໍ່ຕໍ່າ ແລະ ບໍ່ຫວ່າງງານ | 31% |
| 7 | U, ບໍ່ແມ່ນ LI ຫຼື W* | ຫວ່າງງານແຕ່ລາຍຮັບບໍ່ຕໍ່າ ແລະ ບໍ່ຢາກເຮັດວຽກຫຼາຍຂຶ້ນ | 5.5% |
| | | **ລວມ** | **71.2%** |

*ໝາຍເຫດ: " * " ໝາຍເຖິງໜຶ່ງຄະແນນ, " ** " ໝາຍເຖິງສອງຄະແນນ ແລະ,*
*" *** " ໝາຍເຖິງສາມຄະແນນ; ແຫຼ່ງຂໍ້ມູນອ້າງອີງ: Sen (1975); Raj Krishna (1976); Acharya (1983)*
***ແຫຼ່ງຂໍ້ມູນ:** ຄິດໄລ່ຈາກຂໍ້ມູນການສໍາຫຼວດແຮງງານຊົນນະບົດຂອງ NHDR ສົກປີ 2007-08, ກົມສະຖິຕິ.*

ສ່ວນ ວິທີການແກ້ໄຂບັນຫາໃນສອງຮູບແບບທໍາອິດ ກໍ່ຄືການເຂົ້າໄປດໍາເນີນການໂດຍກົງ ແມ່ນໄດ້ສະເໜີມາກ່ອນໜ້ານີ້ແລ້ວ:

1. ສໍາລັບຄົນທຸກຍາກໃນໄລຍະສັ້ນ, ຫຼາຍປະເທດໄດ້ລິເລີ່ມການຄໍ້າປະກັນການຈ້າງງານ ແລະ ແຜນງານຮອງຮັບການຫວ່າງງານຕາມລະດູການຫຼືແມ່ນແຕ່ການຫວ່າງງານແບບຖາວອນ. ກ່ອງ 4.9 ສະເໜີໂຄງຮ່າງຂອງແຜນງານດັ່ງກ່າວ. ລາວເຮົາສາມາດລິເລີ່ມແຜນງານໃດໜຶ່ງໃນລັກສະນະທົດລອງເພື່ອທົດສອບເບິ່ງວ່າຮູບແບບໃດມີຄວາມເໝາະສົມກັບປະເທດທີ່ສຸດ. ເນື່ອງຈາກຈຸດປະສົງ ຂອງແຜນງານເຫຼົ່ານີ້ ແມ່ນເພື່ອສ້າງວຽກເຮັດງານທໍາ ແລະ ສ້າງຊັບສິນໃຫ້ແກ່ຊາວຊົນນະບົດ, ຈຶ່ງຄວນພິຈາລະນາສຶກສາຄວາມເປັນໄປໄດ້ໃນການນໍາໃຊ້ແຮງງານທີ່ເຫຼືອເຂົ້າໃນໂຄງການລົງທຶນຂອງລັດ (ຖ້າວ່າມີຢູ່ໃນຂົງເຂດ ແລະ ຖືກກັບເກນທີ່ກໍານົດໄວ້).

2. ນອກຈາກການກໍານົດເຂດບຸລິມະສິດເຂດພື້ນທີ່ແລ້ວ ການກໍານົດຄົວເຮືອນທຸກຍາກກວ່າໝູ່ ມາເປັນເປົ້າໝາຍອາດຊ່ວຍໃຫ້ສາມາດເພີ່ມປະສິດທິພາບ,ຄວາມສາມາດເຮັດວຽກແລະລາຍຮັບຂອງເຂົາເຈົ້າໄດ້.

## ສະຫຼຸບຫຍໍ້:

*1. ການຫວ່າງງານມີຢູ່ທົ່ວໄປ (12-15%) ເມື່ອຄິດໄລ່ຕາມເວລາບໍ່ມີວຽກເຮັດງານທໍາແບບບໍ່ສະໝັກໃຈທີ່ແຮງງານໄດ້ປະສົບມາເປັນແຕ່ລະໄລຍະໃນລະຫວ່າງເວລາເຮັດວຽກ ແລະ ເວລາພັກຜ່ອນ. ສະພາບການຫວ່າງງານໃນກຸ່ມຄົນທຸກຍາກ, ຊາວກະສິກອນຂະໜາດນ້ອຍ, ຊາວໜຸ່ມ, ແຮງງານໃນຄອບຄົວທີ່ບໍ່ໄດ້ຮັບຄ່າຈ້າງ, ຊາວບ້ານໃນບ້ານທີ່ຖືກຍົກຍ້າຍ, ແຮງງານແມ່ຍິງ ແລະ ກຸ່ມຊົນເຜົ່າທີ່ອາໄສຢູ່ໃນເຂດຫ່າງໄກສອກຫຼີກມີສູງກວ່າກຸ່ມອື່ນໆ. ສະພາບການນີ້ ຊີ້ໃຫ້ເຫັນໄດ້ແຈ້ງເຖິງກຸ່ມແຮງງານເປົ້າໝາຍເພື່ອຫຼຸດຜ່ອນການຫວ່າງງານ.*

*2. ການຫວ່າງງານ ໃນຄວາມໝາຍກວ້າງ (ມີເວລາເຫຼືອຫຼາຍແບບບໍ່ຕັ້ງໃຈ, ມີປະສິດທິພາບການຜະລິດ/ລາຍ ຮັບຕໍ່າ, ຢາກເຮັດວຽກຕື່ມ ແລະ ອື່ນໆ) ແມ່ນມີຫຼາຍແງ່ມູມ. ມີຄວາມເປັນໄປໄດ້ທີ່ຈະກໍານົດໃຫ້ເຫັນ ຄວາມບໍ່ພົ້ນຖົງຕ່າງໆແຕກຕ່າງກັນໄປຂອງພົນລະເມືອງ ທີ່ປະເຊີນກັບການຫວ່າງງານ/ການເຮັດວຽກຕໍ່າກວ່າມາດຕະຖານເວລາ ແລະ ເປັນໄປໄດ້ທີ່ຈະສ້າງນະໂຍບາຍ ເພື່ອກໍານົດເອົາລະດັບຄົວເຮືອນ ແລະ ບຸກຄົນມາເປັນກຸ່ມເປົ້າໝາຍສະເພາະ.*

*3. ມີກໍລະນີ ຫຼື ຕົວຢ່າງໃນການລິເລີ່ມແຜນງານຮັບປະກັນການຈ້າງງານໃຫ້ແກ່ແຮງງານ ເພື່ອທົດແທນສະພາບບໍ່ມີວຽກເຮັດງານທໍາຕາມລະດູການ ແລະ ການຫວ່າງງານທີ່ເກີດຂຶ້ນເປັນໄລຍະ. ເປົ້າໝາຍຕົ້ນຕໍຕ້ອງກໍານົດຂຶ້ນຈາກຄວາມຕ້ອງການ ແລະ ຄວາມຈໍາເປັນ-ເບິ່ງກ່ອງ 4.9 ສໍາລັບການອະທິບາຍກ່ຽວກັບແຜນງານ ການຈ້າງງານ. ວິທີແກ້ໄຂບັນຫາການຫວ່າງງານອີກທາງເລືອກໜຶ່ງ ແມ່ນຂຶ້ນກັບການເຮັດໃຫ້ເສດຖະກິດຊົນນະບົດມີຊີວິດຊີວາຂຶ້ນ ໂດຍການຍົກລະດັບຄວາມຮູ້ ແລະ ຄວາມອາດສາມາດເຮັດວຽກໄດ້ຕົວຈິງຂອງປະຊາຊົນ.*

**ຕາຕະລາງ 4.7: ລາຍຮັບສະເລ່ຍຕໍ່ຫົວຄົນຕໍ່ປີຂອງຄົວເຮືອນແບ່ງຕາມປະເພດບ້ານ ແລະ ກຸ່ມຊົນເຜົ່າ**

| ປະເພດບ້ານ | ລາຍຮັບສະເລ່ຍ (ກີບ) |
|---|---|
| 1 ທັນປ່ຽນອາຊີບ | 1,904,735 |
| 2 ອື່ນໆ | 3,131,390 |
| 3 ກຸ່ມບ້ານຈັດສັນ ໃໝ່ | 1,869,762 |
| 4 ຕິດພັນກັບຕະ ຫຼາດ | 3,844,408 |
| 5 ເຄື່ອນຍ້າຍແຮງງານ | 3,778,529 |
| 6 ຍົກຍ້າຍຖິ່ນຖານ | 2,201,314 |

| ກຸ່ມຊົນເຜົ່າ | ລາຍຮັບສະເລ່ຍ (ກີບ) |
|---|---|
| 1 ລາວ-ໄຕ | 3,280,321 |
| 2 ມອນ-ຂະແມ | 1,850,126 |
| 3 ຈີນ-ຕິເບດ | 1,819,320 |
| 4 ມົ້ງ-ອິວມຽນ | 1,939,326 |

***ແຫຼ່ງຂໍ້ມູນ:*** *ການສຳຫຼວດແຮງງານຊົນນະບົດຂອງ NHDR ສົກປີ 2007-2008, ກົມສະຖິຕິ.*

**ຕາຕະລາງ 4.8: ອັດຕາສ່ວນຂອງລາຍຮັບທີ່ໄດ້ມາຈາກວຽກນອກຂະແໜງກະສິກຳຢູ່ແຕ່ລະປະເພດບ້ານ**

| ປະເພດບ້ານ | ອັດຕາສ່ວນຂອງລາຍຮັບໄດ້ຈາກວຽກນອກຂະແໜງກະສິກຳ (%) |
|---|---|
| ການທັນປ່ຽນອາຊີບ | 26 |
| ຕິດພັນກັບຕະຫຼາດ | 42 |
| ກຸ່ມບ້ານຈັດສັນໃໝ່ | 30 |
| ອື່ນໆ | 56 |
| ເຄື່ອນຍ້າຍແຮງງານໄປເຮັດວຽກຢູ່ປະເທດໄທ | 63 |
| ຍົກຍ້າຍຖິ່ນຖານ | 70 |

***ແຫຼ່ງຂໍ້ມູນ:*** *ການສຳຫຼວດແຮງງານຊົນນະບົດຂອງ NHDR ສົກປີ 2007-2008, ກົມສະຖິຕິ.*

# ລາຍຮັບ, ປັດໄຈທີ່ດິນ ແລະ ມະນຸດ

## ລາຍຮັບ

### ລະດັບລາຍຮັບ ແລະ ຄວາມແຕກຕ່າງໃນແຕ່ລະຂົງເຂດ[66]

ລາຍຮັບສະເລ່ຍຕໍ່ຫົວຄົນຢູ່ໃນກຸ່ມບ້ານຕົວແທນ 20 ແຫ່ງແມ່ນ 2,776,861 ກີບ ຫຼື ເທົ່າກັບ 299 ໂດລາຕໍ່ຫົວ ຄົນຕໍ່ປີຕາມອັດຕາແລກປ່ຽນ 9,300 ກີບຕໍ່ໂດລາ (ເດືອນທັນວາ, 2007). ລາຍຮັບສະເລ່ຍຕໍ່ຫົວຄົນຂອງ ລາວເຮົາ ໃນປີ 2007 ແມ່ນ 800 ໂດລາ; ຊຶ່ງສະແດງໃຫ້ເຫັນວ່າລາຍຮັບຢູ່ໃນບ້ານເຫຼົ່ານີ້ຕ່ຳກວ່າລະດັບສະເລ່ຍຂອງຊາດ. ເຖິງແມ່ນວ່າ ບັນດາບ້ານເຫຼົ່ານີ້ຈະບໍ່ເປັນຕົວແທນໃຫ້ແກ່ເຂດຊົນນະບົດທັງໝົດກໍ່ຕາມ, ແຕ່ຕົວເລກດັ່ງກ່າວກໍ່ຊີ້ໃຫ້ເຫັນຊ່ອງຫວ່າງລະຫວ່າງລາຍຮັບສະເລ່ຍຂອງເຂດຊົນນະບົດທີ່ອີງໃສ່ການຜະລິດກະ ສິກຳ ແລະ ລາຍຮັບສະເລ່ຍຂອງຊາດ.

ຖ້າເບິ່ງຕາມປະເພດບ້ານແລ້ວຈະເຫັນວ່າ ລາຍຮັບສະເລ່ຍຕໍ່ຫົວຄົນຂອງຄົວເຮືອນ ແມ່ນມີສູງທີ່ສຸດຢູ່ໃນບ້ານທີ່ຕິດພັນກັບຕະຫຼາດ ແລະ ບ້ານທີ່ມີການເຄື່ອນຍ້າຍແຮງງານໄປເຮັດວຽກຢູ່ຕ່າງປະເທດ (ຕາຕະລາງ 4.7). ເກືອບທຸກບ້ານທີ່ຢູ່ໃນສອງກຸ່ມນີ້ແມ່ນຕັ້ງຢູ່ໃນເຂດທົ່ງພຽງແມ່ນ້ຳຂອງ ເຊັ່ນ: ແຂວງຈຳປາສັກ ຫຼື ເຂດທີ່ມີຄວາມອຸດົມສົມບູນຢູ່ແຂວງຊຽງຂວາງ, ຊຶ່ງເຮັດໃຫ້ຊາວກະສິກອນ ຫຼື ຜູ້ອື່ນໆສາມາດສ້າງລາຍຮັບໄດ້ຫຼາຍ ກວ່າ. ບ້ານທີ່ຢູ່ໃນ 'ກຸ່ມອື່ນ' ແມ່ນມີລາຍຮັບຕໍ່ຫົວຄົນໃນລະດັບຮອງລົງມາ. ບ້ານທີ່ຖືກຈັດກຸ່ມໃໝ່ ແລະ ບ້ານທີ່ຖືກຍົກຍ້າຍຖິ່ນຖານໃໝ່ ຊຶ່ງສ່ວນໃຫຍ່ຕັ້ງຢູ່ໃນເຂດຫ່າງໄກສອກຫຼີກ ຫຼື ເຂດພູດອຍມີລາຍຮັບຕ່ຳກວ່າຫຼາຍຍ້ອນວ່າທີ່ດິນຂາດຄວາມອຸດົມສົມບູນ, ບໍ່ຖືກນຳໃຊ້ຫຼາຍ ແລະ ຜົນຜະລິດກະສິກຳຕ່ຳ. ຄວາມແຕກຕ່າງຂອງແຕ່ລະເຂດ ຍັງເຫັນໄດ້ຈາກລາຍຮັບຂອງກຸ່ມຊົນເຜົ່າທີ່ເວົ້າພາສາທ້ອງຖິ່ນແຕກຕ່າງກັນ ເຊັ່ນ: ຊົນເຜົ່າໝວດພາສາລາວ-ໄຕ ມີລາຍຮັບສະເລ່ຍສູງກວ່າຊົນເຜົ່າໝວດພາສາອື່ນໆຫຼາຍກວ່າ 40%.

### ລາຍຮັບສະເລ່ຍຕໍ່ຫົວຄົນ ແລະ ໂຄງສ້າງປະຊາກອນແບບຮູບທາດ (ປີລາມິດ)

ອັດຕາການຂະຫຍາຍໂຕຂອງປະຊາກອນມີສູງ ອາດຈະບໍ່ເປັນສິ່ງຈ່ອງດຶງລາຍຮັບຕໍ່ຫົວຄົນ ທີ່ສາມາດເຮັດ ວຽກ, ແຕ່ໂຄງສ້າງຂອງປະຊາກອນອາດເປັນຕົວຈ່ອງດຶງໄດ້. ຖ້າວ່າມີເດັກນ້ອຍຫຼາຍ ແລະ ມີຜູ້ໃຫຍ່ໜ້ອຍ, ການເອື່ອຍອີງຂອງເດັກນ້ອຍຕໍ່ຜູ້ທີ່ຫາລາຍຮັບມາລ້ຽງທີ່ມີຈຳນວນໜ້ອຍກວ່າຈະສົ່ງຜົນໃຫ້ມີລາຍຮັບຕໍ່ຫົວຄົນຕ່ຳ. ຄວາມສຳພັນໃນທາງລົບຂອງອັດຕາການເອື່ອຍອີງທາງດ້ານເສດຖະກິດ ແລະ ລາຍຮັບຕໍ່ຫົວຄົນຊີ້ໃຫ້ເຫັນວ່າການເຮັດວຽກທີ່ມີປະສິດທິຜົນມີຄວາມສຳຄັນຫຼາຍຕໍ່ການລຶບລ້າງຄວາມທຸກຍາກ (ຮູບສະແດງ 4.9). ສິ່ງດັ່ງກ່າວນີ້ຍັງຊີ້ໃຫ້ເຫັນວ່າຂະໜາດຂອງຄອບຄົວຕ້ອງບໍ່ໃຫຍ່ເກີນໄປ ແລະ ຕ້ອງມີການເກີດລູກຫ່າງ. ຖ້າພິຈາລະນາຈາກມຸມມອງດ້ານການພັດທະນາມະນຸດແລ້ວ ຈະເຫັນໄດ້ວ່າຖ້າຄອບຄົວໜຶ່ງ ຫາກມີລູກໜ້ອຍຄົນ, ພໍ່ແມ່ກໍ່ຈະສາມາດເບິ່ງແຍງ

66 ການສຳຫຼວດນີ້ ໄດ້ພະຍາຍາມວັດແທກ ລາຍຮັບ ແລະ ບໍ່ແມ່ນການຊົມໃຊ້, ຊຶ່ງເປັນວິທີປະຕິບັດປົກກະຕິໃນການວັດແທກມາດຕະຖານການດຳລົງຊີວິດ. ການຄາດຄະເນລາຍຮັບຂອງຄົວເຮືອນຊາວກະສິກອນ ມີຄວາມຫຍຸ້ງຍາກເພາະວ່າ ລາຍຮັບໄດ້ມາຈາກຫຼາຍແຫຼ່ງ ແລະ ຫຼາຍເວລາແຕກຕ່າງກັນໃນໜຶ່ງປີ. ການຄາດຄະເນລາຍຮັບມີຄວາມສັບສົນເພາະວ່າປະຊາຊົນບໍ່ໄດ້ມີລາຍຮັບເປັນເງິນເລື້ອຍໆໄປ: ເຂົາເຈົ້າຊົມໃຊ້ຜົນຜະລິດທີ່ໄດ້ມາຈາກແຮງງານຂອງຕົນເອງ ເຊັ່ນ ການເກັບເຄື່ອງປ່າຂອງດົງ ຫຼື ຫາປາ ສຳລັບກິນເອງ. ເຖິງຢ່າງໃດກໍ່ຕາມ, ລາຍຮັບກໍ່ໃຫ້ຂໍ້ມູນທີ່ການຊົມໃຊ້ບໍ່ສາມາດໃຫ້ໄດ້. ອົງປະກອບຕ່າງໆຂອງລາຍຮັບ ແມ່ນໄດ້ລະບຸໄວ້ຕໍ່ໄປນີ້: 1. ລາຍຮັບຈາກພື້ນທີ່ປູກຝັງຂອງຕົນເອງແມ່ນລາຍຮັບທີ່ໄດ້ມາຈາກພືດ 17 ຊະນິດ (ທີ່ປ່ຽນເປັນເງິນ). ລາຍຮັບຈາກກິດຈະກຳນອກລະດູການ ແລະ ນອກຂະແໜງກະສິກຳ ແມ່ນເບິ່ງໄດ້ຈາກເອກະສານຊ້ອນທ້າຍ 4.1.2 ລາຍຮັບດັ່ງກ່າວຮວມກັນກາຍເປັນລາຍຮັບລວມ. ລາຍຮັບຕໍ່ຫົວຄົນ ແມ່ນໄດ້ມາຈາກການຫານລາຍຮັບຂອງຄົວເຮືອນໃຫ້ຈຳນວນສະມາຊິກໃນຄົວເຮືອນນັ້ນ.

**ຮູບສະແດງ 4.9: ເສັ້ນສະແດງລາຍຮັບສະເລ່ຍຕໍ່ຫົວຄົນຕາມອັດຕາການເອື່ອຍອີງທາງດ້ານເສດຖະກິດ**




***ໝາຍເຫດ:*** *ອັດຕາການເອື່ອຍອີງທາງດ້ານເສດຖະກິດ ແມ່ນຈຳນວນຜູ້ທີ່ບໍ່ໄດ້ເຮັດວຽກຫານໃຫ້ຈຳນວນສະມາຊິກທັງ ໝົດໃນຄົວເຮືອນ. ກຸ່ມທີ່ຈັດວ່າມີອັດຕາຕ່ຳ, ຕ່ຳປານກາງ, ສູງປານກາງ ແລະ ສູງແມ່ນໄດ້ກຳນົດຕາມໄລຍະຫ່າງສະເໝີກັນລະຫວ່າງກຸ່ມຕ່ຳສຸດ ແລະ ກຸ່ມສູງສຸດ.*

***ແຫຼ່ງຂໍ້ມູນ:*** *ການສຳຫຼວດແຮງງານຊົນນະບົດຂອງ NHDR ສົກປີ 2007-2008, ກົມສະຖິຕິ.*

ດ້ານສຸຂະພາບ, ການສຶກສາ ແລະ ການເຂົ້າເຖິງສິ່ງອຳນວຍຄວາມສະດວກໃຫ້ແກ່ລູກໄດ້ດີກວ່າ ແລະ ຈະເຮັດໃຫ້ເຂົາເຈົ້າມີທາງເລືອກໃນການດຳລົງຊີວິດໄດ້ຫຼາກ ຫຼາຍກວ່າ. ນອກຈາກນີ້, ດິນກະສິກຳຂອງຄອບຄົວ ກໍ່ບໍ່ຈຳເປັນຕ້ອງແບ່ງປັນເປັນຫຼາຍຕອນໂພດ ໃນກໍລະນີທີ່ລູກຫຼານຕ້ອງການນຳໃຊ້ທີ່ດິນທີ່ມີຢູ່.

## ແຫຼ່ງລາຍຮັບ

ອັດຕາສ່ວນຂອງແຕ່ລະແຫຼ່ງລາຍຮັບໃນຮູບສະແດງ 4.10 ຊີ້ໃຫ້ເຫັນວ່າ ການຜະລິດກະສິກຳ ຊຶ່ງລວມເອົາການປູກພືດ ແລະ ທີ່ບໍ່ແມ່ນພືດແຕ່ບໍ່ລວມສັດລ້ຽງແມ່ນແຫຼ່ງລາຍຮັບສຳຄັນ. ເຖິງຢ່າງໃດກໍ່ຕາມ, ອັດຕາສ່ວນຂອງການຜະລິດກະສິກຳກໍ່ຍັງຕ່ຳກວ່າເຄິ່ງໜຶ່ງ. ໃນຕົວຈິງແລ້ວ, ມັນກົງກັນຂ້າມກັບທີ່ຄິດໄວ້ວ່າ ອັດຕາສ່ວນຂອງລາຍຮັບທີ່ໄດ້ມາຈາກກິດຈະກຳນອກລະດູການ ແລະ ນອກຂະແໜງການກະສິກຳສູງກວ່າ 30%. ລາຍຮັບທີ່ໄດ້ມາຈາກນອກເຂດກະສິກຳຂອງຄອບຄົວມີຄວາມແຕກຕ່າງກັນໄປຕາມແຕ່ລະປະເພດບ້ານຢູ່ໃນ ລະດັບລະຫວ່າງ 26-70% (ຕາຕະລາງ 4.8). ສິ່ງດັ່ງກ່າວນີ້ຊີ້ໃຫ້ເຫັນວ່າການທີ່ປະຊາຊົນເຮັດຫຼາຍວຽກໃນຮອບປີ, ການກຳນົດ ແລະ ເລືອກເຟັ້ນວຽກງານຈາກກິດຈະກຳນອກລະດູການ ແລະນອກຂະແໜງກະສິກຳທີ່ມີທ່າແຮງອາດຊ່ວຍສ້າງຄວາມຫຼາກຫຼາຍໃຫ້ແກ່ອາຊີບການງານ ແລະ ເພີ່ມລາຍຮັບຂອງປະຊາຊົນໄດ້[67].

**ຕາຕະລາງ 4.9: ຄ່າຂອງສຳປະສິດຈີນີຂອງຄວາມບໍ່ສະເໝີພາບສຳລັບແຕ່ລະປະເພດບ້ານ**

| ປະເພດບ້ານ | ຄ່າຂອງສຳປະສິດຈີນີ (Gini) |
|---|---|
| 1 ທັນປ່ຽນອາຊີບ | 0.4157 |
| 2 ທັນປ່ຽນອາຊີບ | 0.4290 |
| 3 ກຸ່ມບ້ານຈັດສັນໃໝ່ | 0.4226 |
| 4 ຕິດພັນກັບຕະຫຼາດ | 0.4635 |
| ມີການເຄື່ອນຍ້າຍແຮງງານໄປເຮັດວຽກຢູ່ຕ່າງປະເທດ | 0.4083 |
| 6 ຍົກຍ້າຍຖິ່ນຖານ | 0.5605 |
| 7 ກຸ່ມຕົວແທນທັງໝົດ | 0.4691 |

***ແຫຼ່ງຂໍ້ມູນ:*** *ການສຳຫຼວດແຮງງານຊົນນະບົດຂອງ NHDR ສົກປີ 2007-2008, ກົມສະຖິຕິ.*

67 ການສຶກສາໜຶ່ງທີ່ໄດ້ສຳຫຼວດກຸ່ມຕົວແທນໜ້ອຍໜຶ່ງ ເຊິ່ງຂຽນເປັນພາສາລາວແມ່ນບົດຂອງ ທ່ານ ແກ້ວມີໄຊ ແລະ ບຸກຄົນອື່ນໆ (2003). ການສຶກສາດັ່ງກ່າວໄດ້ໄຈ້ແຍກກິດຈະກຳຕົ້ນຕໍທີ່ມີທ່າແຮງໃນການເຕີບໂຕ ແລະ ສ້າງວຽກເຮັດງານທຳຫຼາຍຂຶ້ນ.

**ຮູບສະແດງ 4.10: ອັດຕາສ່ວນຂອງແຕ່ລະແຫຼ່ງລາຍຮັບທີ່ປະກອບເຂົ້າເປັນລາຍຮັບທັງໝົດຂອງຄົວເຮືອນ**




***ແຫຼ່ງຂໍ້ມູນ:*** *ການສຳຫຼວດແຮງງານຊົນນະບົດຂອງ NHDR ສົກປີ 2007-2008, ກົມສະຖິຕິ.*

**ຕາຕະລາງ 4.10: ອັດຕາສ່ວນຂອງຄົວເຮືອນທີ່ບອກເຖິງລະດັບການມີເຂົ້າກິນພຽງພໍໃນແຕ່ລະປະເພດບ້ານ**

| ປະເພດບ້ານ | ມີສ່ວນເກີນຫຼາຍ – ສາມາດຂາຍໄດ້ | ພຽງພໍສຳລັບໝົດປີ | ພຽງພໍສຳລັບ 8-10 ເດືອນ; ຊື້ກິນບາງຄັ້ງ | ບໍ່ພຽງພໍ–ຊື້ເປັນປະຈຳ ຫຼື ບໍ່ມີກິນເລີຍ |
|---|---|---|---|---|
| ຫັນປ່ຽນອາຊີບ | 22 | 34.6 | 38.2 | 5.2 |
| ອື່ນໆ | 39.9 | 27.6 | 21.4 | 11.1 |
| ກຸ່ມບ້ານຈັດສັນໃໝ່ | 23.4 | 25.6 | 37.9 | 13.2 |
| ຕິດພັນກັບຕະຫຼາດ | 12.6 | 33.6 | 33 | 20.9 |
| ມີແຮງງານໄປເຮັດວຽກຢູ່ຕ່າງປະເທດ | 35.2 | 21.5 | 16.9 | 26.4 |
| ຍົກຍ້າຍຖິ່ນຖານ | 8.4 | 29.3 | 51.4 | 10.9 |
| ຕົວແທນທັງໝົດ | 26.6 | 27.6 | 31.3 | 14.4 |

***ແຫຼ່ງຂໍ້ມູນ:*** *ການສຳຫຼວດແຮງງານຊົນນະບົດຂອງ NHDR ສົກປີ 2007-2008, ກົມສະຖິຕິ.*

ເປັນເລື່ອງແປກບໍ່ວ່າຄົວເຮືອນໜຶ່ງມີແຫຼ່ງລາຍຮັບຫຼາຍກວ່າໜຶ່ງແຫຼ່ງ? ຮູບສະແດງ 4.11 ສະແດງໃຫ້ເຫັນສິ່ງທີ່ໜ້າສົນໃຈ ແລະ ການປູກພືດຫຼາຍຊະນິດກໍ່ເຊັ່ນດຽວກັນ (ທີ່ຄ້າຍຄືກັບການມີຫຼາຍແຫຼ່ງລາຍຮັບ). ນອກຈາກການເພີ່ມລາຍຮັບແລ້ວ, ການມີຫຼາຍແຫຼ່ງລາຍຮັບເປັນສິ່ງຄໍ້າປະກັນກໍລະນີທີ່ແຫຼ່ງໃດແຫຼ່ງໜຶ່ງ ຫຼື ຫຼາຍແຫຼ່ງຫາກມີບັນຫາ. ສິ່ງດັ່ງກ່າວ ແມ່ນຄວາມເປັນຈິງໂດຍສະເພາະໃນເສດຖະກິດທີ່ມີການປູກພືດຊະນິດດຽວເພື່ອລ້ຽງຊີບ: ເມື່ອພືດຊະນິດນັ້ນຖືກທຳລາຍຈາກໄພນໍ້າຖ້ວມ ຫຼື ໄພແຫ້ງແລ້ງ ກໍ່ຈະມີລາຍຮັບຈາກແຫຼ່ງອື່ນ ທົດແທນ ເຊັ່ນ: ຈາກປ່າໄມ້ ຫຼື ການຫາປາ.

## ການກະຈາຍລາຍຮັບ

ການກະຈາຍລາຍຮັບມີຄວາມສຳຄັນຕໍ່ການພັດທະນາມະນຸດ. ສຳລັບລະດັບປະຈຸບັນຂອງລາຍຮັບຕໍ່ຫົວຄົນ ໃນບ້ານເຫຼົ່ານີ້ ຊຶ່ງເທົ່າກັບເຄິ່ງໜຶ່ງຂອງລະດັບຊາດ, ຖ້າຫາກວ່າເສັ້ນການກະຈາຍລາຍຮັບຫາກມີຄວາມງ່ຽງກໍ່ສະແດງວ່າບາງຄົວເຮືອນຈະມີລາຍຮັບລ້ຽງຊີບຕໍ່າຫຼາຍ. ນອກຈາກນີ້, ຄວາມບໍ່ເທົ່າທຽມກັນທາງດ້ານລາຍຮັບຈະເພີ່ມຊ່ອງຫວ່າງທາງສັງຄົມລະຫວ່າງຜູ້ທີ່ມີລາຍຮັບສູງກວ່າ ແລະ ຜູ້ທີ່ມີລາຍຮັບຕໍ່າກວ່າ: ຊຶ່ງຜູ້ທີ່ມີລາຍຮັບຕໍ່າກວ່າ ຈະມີບົດ

**ຮູບສະແດງ 4.11: ເສັ້ນສະແດງຈຳນວນແຫຼ່ງລາຍຮັບ ແລະ ດັດຊະນີການປູກພືດຫຼາຍຊະນິດແບ່ງຕາມລາຍຮັບສະເລ່ຍຕໍ່ຫົວຄົນຂອງຄົວເຮືອນ**




***ແຫຼ່ງຂໍ້ມູນ:*** *ການສຳຫຼວດແຮງງານຊົນນະບົດຂອງ NHDR ສົກປີ 2007-2008, ກົມສະຖິຕິ.*

ບາດ ແລະ ຄວາມເຂັ້ມແຂງໜ້ອຍກວ່າ. ໃນສັງຄົມບ້ານມີບັນຫາດັ່ງກ່າວຫຼາຍກວ່າໃນສັງ ຄົມໃນຕົວເມືອງ. ຕົວຊີ້ບອກຄວາມບໍ່ເທົ່າທຽມກັນ (Gini) ແມ່ນ 0.4691 (ແຖວສຸດທ້າຍຂອງຕາຕະລາງ 4.9). ຕົວເລກດັ່ງກ່າວນີ້ແມ່ນສູງ.

ການກະຈາຍລາຍໄດ້ມີຄວາມແຕກຕ່າງກັນຫຼາຍຕາມແຕ່ລະປະເພດບ້ານ. ໃນ 5 ປະເພດທຳອິດຂອງບ້ານ, ຄ່າຈີນີແມ່ນຕ່ຳກວ່າຄ່າຈີນີລວມ 0.47, ໃນຂະນະທີ່ປະເພດທີ 6 ແມ່ນສູງກວ່າ. ການທີ່ກຸ່ມບ້ານຍົກຍ້າຍຖິ່ນຖານໃໝ່ມີຄວາມບໍ່ເທົ່າທຽມກັນສູງທີ່ສຸດທາງດ້ານລາຍຮັບຊີ້ໃຫ້ເຫັນວ່າການຍົກຍ້າຍຖິ່ນຖານປະຊາຊົນຍັງບໍ່ທັນບັນລຸໝາກຜົນທີ່ໜ້າພໍໃຈ. ດັ່ງນັ້ນ, ຕ້ອງໄດ້ເອົາໃຈໃສ່ຕື່ມຕໍ່ບັນຫາຊີວິດການເປັນຢູ່ຂອງປະຊາຊົນທີ່ຢູ່ໃນບ້ານຍົກຍ້າຍຖິ່ນຖານໃໝ່ດັ່ງກ່າວ.

## ການຄ້ຳປະກັນດ້ານສະບຽງອາຫານ

ຢູ່ເຂດຊົນນະບົດຂອງລາວ, ເຂົ້າ ແລະ ຜະລິດຕະພັນຈາກປ່າມີຄວາມສຳຄັນເປັນພິເສດຕໍ່ການຄ້ຳປະກັນທາງດ້ານສະບຽງອາຫານ. ເຂົ້າປະສົມກັບຊີ້ນສັດປ່າ, ຜັກ, ໝາກໄມ້ ແລະ ປາແມ່ນອາຫານຫຼັກສຳລັບຄົວເຮືອນຊົນນະບົດ, ເຖິງແມ່ນວ່າສ່ວນປະສົມຂອງອົງປະກອບອາຫານເຫຼົ່ານັ້ນຈະແຕກຕ່າງກັນໄປໃນຂອບເຂດທົ່ວປະເທດກໍ່ຕາມ, ສ່ວນໜຶ່ງຂອງອາຫານດັ່ງກ່າວແມ່ນໄດ້ມາຈາກປ່າໄມ້. ປ່າໄມ້ ຍັງສະໜອງຜະລິດຕະພັນທີ່ບໍ່ແມ່ນອາຫານເຊັ່ນ: ອຸປະກອນກໍ່ສ້າງ, ເສັ້ນໄຍ, ຂີ້ຊີ ແລະ ອື່ນໆ.

ຕາຕະລາງ 4.10 ສະແດງໃຫ້ເຫັນວ່າຫຼາຍກວ່າເຄິ່ງໜຶ່ງໜ້ອຍໜຶ່ງຂອງຄົວເຮືອນທີ່ຖືກສຳພາດມີເຂົ້າກິນພຽງພໍ. ບ້ານທີ່ຖືກຈັດກຸ່ມ,ຖືກຍົກຍ້າຍຖິ່ນຖານ ແລະ ທັນປ່ຽນອາຊີບທຸກຍາກກວ່າໃນລະດັບໃດໜຶ່ງ ແລະ ບໍ່ຮັບປະກັນທາງດ້ານເຂົ້າກິນຫຼາຍກວ່າ. ເຖິງຢ່າງໃດກໍ່ຕາມ, ຄວາມສຳພັນດັ່ງກ່າວບໍ່ແມ່ນຈະຖືກໃນທຸກສະພາບ ແລະ ຂົງເຂດ. ດັ່ງນັ້ນ ຈຶ່ງມີຄວາມຈຳເປັນຕ້ອງແຍກການຕິດຕາມສະເພາະບັນຫາຄວາມທຸກຍາກ ແລະ ຄວາມບໍ່ຮັບປະກັນທາງດ້ານເຂົ້າກິນ.

ຮູບສະແດງ 4.12 ສະແດງໃຫ້ເຫັນຜະລິດຕະພັນຕົ້ນຕໍ 10 ຢ່າງທີ່ໄດ້ຈາກປ່າ. ເມື່ອທຽບໃສ່ໄລຍະ 5 ປີຫຼັງ ເຫັນວ່າເຄື່ອງປ່າຂອງດົງຂອງຄົວເຮືອນສ່ວນໃຫຍ່ໄດ້ຫຼຸດລົງ. ຖ້າບໍ່ພິຈາລະນາເຖິງ ວິທີການໄຈ້ແຍກຂໍ້ມູນຈະເຫັນໄດ້ວ່າ ລັກສະນະຂອງແຕ່ລະປະເພດຂ້ອນຂ້າງຄ້າຍຄືກັນ. ຈາກລັກສະນະດັ່ງກ່າວນີ້ ຄວນເອົາໃຈໃສ່ໃນສອງດ້ານຄື:

1. ປະຊາຊົນນຳໃຊ້ຜະລິດຕະພັນຈາກຕະຫຼາດມາທົດແທນເຄື່ອງປ່າຂອງດົງທີ່ຫາມາໄດ້ຈາກປ່າ, ແຕ່ວ່າເຂົາເຈົ້າກໍ່ຕ້ອງໄດ້ຊື້ເອົາ. ສະນັ້ນ, ເຂົາເຈົ້າຕ້ອງມີຄ່າໃຊ້ຈ່າຍ ຊຶ່ງກໍ່ໝາຍຄວາມວ່າເຂົາເຈົ້າຕ້ອງມີວຽກເຮັດງານທຳ. ດັ່ງນັ້ນ, ການຢູ່ຊື່ໆ ຫຼື ການບໍ່ມີວຽກເຮັດງານທຳແມ່ນບັນຫາແທ້ຈິງທີ່ເຂົາເຈົ້າກຳລັງປະເຊີນຢູ່.

2. ການຫຼຸດລົງຂອງເຄື່ອງປ່າຂອງດົງເປັນການບົ່ງບອກເຖິງແຫຼ່ງລາຍຮັບອື່ນກໍ່ຫຼຸດລົງ. ເນື່ອງຈາກວ່າການມີຫຼາຍແຫຼ່ງລາຍຮັບເປັນສິ່ງຄ້ຳປະກັນຕໍ່ການສູນເສຍ ຫຼື ການຫຼຸດລົງຂອງແຫຼ່ງລາຍຮັບໃດໜຶ່ງ ຫຼື ຫຼາຍແຫຼ່ງ. ສະນັ້ນ, ການທີ່ເຄື່ອງປ່າຂອງດົງຫຼຸດລົງ ຈຶ່ງເປັນບັນຫາຕໍ່ຄວາມໝັ້ນຄົງທາງດ້ານລາຍຮັບ ແລະ ສະບຽງອາຫານຂອງຊາວບ້ານ.

**ຮູບສະແດງ 4.12: ອັດຕາສ່ວນຄົວເຮືອນແຈກຢາຍຕາມຄໍາຕອບຂອງເຂົາເຈົ້າກ່ຽວກັບເຄື່ອງປ່າຂອງດົງຊະນິດຕ່າງໆທີ່ມີໃນປະຈຸບັນທຽບກັບໄລຍະ 5 ປີກ່ອນ**




***ແຫຼ່ງຂໍ້ມູນ:*** *ການສໍາຫຼວດແຮງງານຊົນນະບົດຂອງ NHDR ສົກປີ 2007-2008, ກົມສະຖິຕິ.*

## *ສະຫຼຸບຫຍໍ້:*

*1. ລາຍຮັບໃນຊົນນະບົດ ແມ່ນຕໍ່າກວ່າໃນຕົວເມືອງຫຼາຍ ຊຶ່ງບັນຫານີ້ຊີ້ໃຫ້ເຫັນເຖິງຄວາມຈໍາເປັນອັນຮີບດ່ວນທີ່ຕ້ອງສົ່ງເສີມການພັດທະນາຊົນນະບົດເພື່ອຫຼຸດຜ່ອນຄວາມທຸກຍາກ ແລະ ເພີ່ມລະດັບການພັດ ທະນາມະນຸດ.*

*ກ. ກ່ອນອື່ນໝົດ, ຕ້ອງຍົກສະມັດຕະພາບ ການຜະລິດໃນເນື້ອທີ່ດິນໃຫ້ສູງຂຶ້ນ. ບັນຫານີ້ ໄດ້ອະທິບາຍໄວ້ຢູ່ໃນບົດທີ 3.*

*ຂ. ການເພີ່ມລາຍຮັບຈາກກິດຈະກໍານອກກະສິກໍາ ຫຼື ນອກການປູກຝັງລ້ຽງສັດສາມາດປະຕິບັດໄປຄຽງຄູ່ກັນກັບການເລືອກເຟັ້ນລະອຽດກິດຈະກໍານອກລະດູການ ແລະ ນອກຂະແໜງກະສິກໍາ ແລະ ການສົ່ງເສີມຕ່າງໆໂດຍຜ່ານລະບົບສິນເຊື່ອ, ການເຂົ້າເຖິງຕະຫຼາດ ແລະ ເຕັກໂນໂລຊີ (ການຝຶກອົບຮົມ).*

*2. ການຫຼຸດລົງຢ່າງຫຼວງຫຼາຍຂອງເຄື່ອງປ່າຂອງດົງ ແລະ ສັດນໍ້າເນື່ອງຈາກນໍ້າໃນຫ້ວຍໜອງຄອງບຶງຕ່າງໆຫຼຸດລົງ ແມ່ນເຫດຜົນໜຶ່ງທີ່ເຮັດໃຫ້ຂາດຄວາມໝັ້ນຄົງດ້ານສະບຽງອາຫານ. ດັ່ງນັ້ນ, ຈຶ່ງມີຄວາມຈໍາເປັນຕ້ອງຕິດຕາມສະພາບຄວາມປອດໄພທາງດ້ານສະບຽງອາຫານ ໂດຍແຍກຈາກການຕິດຕາມຕົວຊີ້ບອກຕ່າງໆດ້ານຄວາມທຸກຍາກ (ເບິ່ງບົດທີ 2). ວິທີການຕິດຕາມດ້ານໜຶ່ງກໍ່ຄືການບັນທຶກຂໍ້ມູນທີ່ກ່ຽວພັນກັບຕົວປ່ຽນຕ່າງໆ ລົງໃນປຶ້ມບັນທຶກສະຖິຕິຂອງບ້ານ.*

*3. ລາຍຮັບຂອງກຸ່ມຊົນເຜົ່າ ທີ່ບໍ່ແມ່ນໝວດພາສາລາວ-ໄຕ ເກືອບເທົ່າກັບເຄິ່ງໜຶ່ງ ຂອງລາຍຮັບ(ຕໍ່ຫົວຄົນ) ຂອງຊົນເຜົ່າໝວດພາສາລາວ-ໄຕ. ເນື່ອງຈາກວ່າຊົນເຜົ່າເຫຼົ່ານັ້ນອາໄສຢູ່ໃນເຂດຫ່າງໄກສອກຫຼີກ, ເຂດພູດອຍ ແລະ ປ່າ ຈຶ່ງຂາດທາງເລືອກໃນການສ້າງລາຍຮັບ. ຄວນເອົາໃຈໃສ່ເປັນພິເສດຕໍ່ເຂດທີ່ມີການຫັນປ່ຽນອາຊີບໃໝ່, ເຂດບ້ານຈັດສັນໃໝ່, ເຂດຍົກຍ້າຍຖິ່ນຖານ ແລະ ອື່ນໆ. ດັ່ງທີ່ໄດ້ກ່າວມາແລ້ວນັ້ນ, ຄວາມຕ້ອງການດ້ານການລົງທຶນຂະໜາດໃຫຍ່ ເຂົ້າໃສ່ພື້ນຖານໂຄງລ່າງທາງດ້ານສັງຄົມ ແລະ ວັດຖຸຢູ່ເຂດຫ່າງໄກສອກຫຼີກກໍ່ແມ່ນສິ່ງສໍາຄັນທີ່ໄດ້ເນັ້ນໜັກຢູ່ໃນບົດລາຍງານສະບັບນີ້ເຊັ່ນດຽວກັນ.*

## ປັດໄຈທີ່ດິນກະສິກໍາ ແລະ ມະນຸດ

### ທີ່ດິນຄອບຄອງ ແລະ ດິນປູກຝັງ

ດິນກະສິກໍາ ແມ່ນແຫຼ່ງສໍາຄັນທີ່ສຸດຂອງການດໍາລົງຊີວິດຂອງປະຊາຊົນລາວໃນເຂດຊົນນະບົດ. ຈາກຮູບສະແດງ 4.13 ຈະເຫັນໄດ້ວ່າຄົວເຮືອນທີ່ມີເນື້ອທີ່ດິນຕໍ່ຫົວຄົນສູງແມ່ນມີຫຼາຍຢູ່ໃນກຸ່ມຄົນທີ່ມີລາຍຮັບຕໍ່ຫົວຄົນສູງກວ່າ ແລະ ມີໜ້ອຍຢູ່ໃນກຸ່ມຄົນທີ່ມີລາຍຮັບຕໍ່ຫົວຄົນຕໍ່າກວ່າ[68]. ດິນກະສິກໍາຕໍ່ແຮງງານຜູ້ໜຶ່ງຢູ່ໃນບ້ານຕົວແທນແມ່ນມີເນື້ອທີ່ປະມານ 0.8 ເຮັກຕາ. ຕາຕະລາງ 4.11 ສະແດງໃຫ້ເຫັນຄວາມບໍ່ເທົ່າທຽມກັນຂອງ ການກະຈາຍເນື້ອທີ່ດິນທັງໃນລະດັບລວມກໍ່ຄືພາຍໃນບ້ານແຕ່ລະປະເພດ.

68 ການຄອບຄອງທີ່ດິນໃນທີ່ນີ້ ໝາຍເຖິງການນໍາໃຊ້ຫຼືຄຸ້ມຄອງທີ່ດິນຂອງຊາວກະສິກອນ ບໍ່ແມ່ນການຖືກໍາມະສິດເອກະສານທີ່ດິນ.

ສຳປະສິດຈີນີຂອງຄວາມບໍ່ເທົ່າທຽມກັນດ້ານການຄອບຄອງທີ່ດິນກະສິກຳ ໂດຍສະເລ່ຍແລ້ວ ແມ່ນເທົ່າກັບ 0.54 ໃນຂະນະທີ່ສຳປະສິດດັ່ງກ່າວຂອງດິນທີ່ໄດ້ຮັບການສັບຊ່າວປູກຝັງ ແມ່ນຕ່ຳກວ່າຄືຢູ່ໃນລະດັບ 0.49. ນອກຈາກນີ້, 15% ຂອງຄົວເຮືອນຊົນນະບົດ ບໍ່ໄດ້ຄອບຄອງທີ່ດິນກະສິກຳ. ປະມານເຄິ່ງໜຶ່ງຂອງຄົວເຮືອນຂາດທີ່ດິນກະສິກຳແມ່ນຄົວເຮືອນ ຊາວກະສິກອນ ບໍ່ມີດິນເປັນຂອງຕົນເອງ: ເຂົາເຈົ້າເຊົ່າທີ່ດິນ, ປູກພືດຢູ່ໃນດິນຄົນອື່ນ, ຫາປາ, ຕັດໄມ້, ຮັບຈ້າງຢູ່ຕາມດິນຂອງຄົນອື່ນໃນເວລາຫວ່າງ ແລະອື່ນໆ. ລາຍຮັບຕໍ່ຫົວຄົນແມ່ນ ໜ້ອຍກວ່າເຄິ່ງໜຶ່ງຂອງລາຍຮັບລວມຍັງຊີ້ໃຫ້ເຫັນເຖິງຄວາມສຳຄັນຂອງການຄອບຄອງທີ່ດິນ.

ຂະໜາດເນື້ອທີ່ສະເລ່ຍຂອງດິນໜຶ່ງຕອນ ແມ່ນໜ້ອຍກວ່າໜຶ່ງເຮັກຕາ. ໂດຍສະເລ່ຍແລ້ວ, ຜູ້ຄອບຄອງທີ່ດິນໜຶ່ງຄົນ ມີດິນປະມານສອງຕອນ. ການແບ່ງທີ່ດິນອອກເປັນຫຼາຍຕອນເກີນໄປສົ່ງຜົນເສຍຕໍ່ປະສິດທິພາບການນຳໃຊ້ທີ່ດິນ ແລະ ການລົງທຶນໃນທີ່ດິນຕອນນັ້ນໆ. ການຫຼຸດຂະໜາດຂອງຕອນດິນລົງ, ການແບ່ງດິນເປັນຕອນ ແລະ ການເກີດຂຶ້ນຂອງຜູ້ບໍ່ມີທີ່ດິນ ແມ່ນສອດຄ່ອງກັບຂໍ້ມູນທີ່ໄດ້ມາກ່ອນໜ້ານີ້ ທີ່ວ່າຈຳນວນແຮງງານຮັບຈ້າງທົ່ວໄປພວມເພີ່ມຂຶ້ນ ແລະ ການຫວ່າງງານກໍ່ມີສູງຂຶ້ນ. ດັ່ງນັ້ນ, ການບໍ່ມີທີ່ດິນອາດຈະກາຍ ເປັນບັນຫາໃຫຍ່ ຕໍ່ການດຳລົງຊີວິດຂອງປະຊາຊົນໃນອະນາຄົດອັນໃກ້ນີ້ ຖ້າຫາກວ່າຜູ້ທີ່ຖືກກະທົບບໍ່ມີທາງເລືອກໃນການດຳລົງຊີວິດໃໝ່ທີ່ມີຄວາມໝັ້ນຄົງ.

## ປັດໄຈມະນຸດ

ປັດໄຈມະນຸດມີຄວາມໝາຍຫຼາຍກວ່າການສຶກສາ, ທັກສະ ຫຼື ສຸຂະພາບ. ມັນຮວມເຖິງຄວາມສາມາດ ແລະ ຄວາມເຂັ້ມແຂງຂອງຄົນເຮົາມາແຕ່ກຳເນີດ. ເຖິງຢ່າງໃດກໍ່ຕາມ, ການມີຂໍ້ມູນຈຳກັດເຮັດໃຫ້ການວິໄຈຈຳກັດຢູ່ໃນສະເພາະການສຶກສາດ້ານດຽວ. ທັດສະນະຄວາມຄິດເຫັນໃນ 'ການສະສົມທຶນມະນຸດ' ນັ້ນແມ່ນເກີດມາຈາກຄວາມຈິງທີ່ວ່າມີການຄິດໄລ່ຕົວຈິງດ້ານອັດຕາສ່ວນຜົນຕອບແທນຂອງການສຶກສາ ທີ່ຄ້າຍຄືກັນກັບອັດ ຕາສ່ວນຜົນຕອບແທນຈາກການລົງທຶນທາງດ້ານວັດຖຸ[69]. ໝາຍຄວາມວ່າ: ເມື່ອແຮງງານຫາກຍ້າຍຈາກວຽກ 'ທີ່ໃຊ້ແຮງງານດ້ວຍກຳລັງກາຍເປັນຕົ້ນຕໍ' ມາສູ່ວຽກ 'ທີ່ເນັ້ນທັກສະ ຫຼື ມັນສະໝອງ', ໃນເວລານັ້ນຜະລິດຕະພາບຂອງແຮງງານ ແລະ ລາຍຮັບຂອງເຂົາເຈົ້າກໍ່ຈະເພີ່ມຂຶ້ນ. ດັ່ງນັ້ນ, ການສຶກສາຈຶ່ງມີຄວາມສຳຄັນຫຼາຍ ໃຫ້ແກ່ແຮງງານ. ພາກນີ້ໄດ້ພະຍາຍາມ ຄິດໄລ່ການສະສົມຄວາມຮູ້ ຫຼື ທຶນມະນຸດຕໍ່ຄົວເຮືອນເພື່ອສຶກສາໃຫ້ຮູ້ວ່າມີຄວາມສຳພັນກັບລາຍຮັບຄືແນວໃດ (ສຳລັບວິທີຄິດໄລ່ໃຫ້ເບິ່ງກ່ອງ 4.10).

ໃນກຸ່ມຕົວຢ່າງທີ່ຍົກຂຶ້ນມານີ້, ການສະສົມທຶນມະນຸດ ສະເລ່ຍຕໍ່ຫົວຄົນຕໍ່ຄົວເຮືອນ (ສະມາຊິກໃນຄົວເຮືອນ ອາຍຸ 10 ປີ ຫຼື ຫຼາຍກວ່າ) ແມ່ນ 3.7 ປີ ແລະ ສຳປະສິດຈີນີຂອງຄວາມບໍ່ເທົ່າທຽມກັນດ້ານທຶນມະນຸດ ໃນບັນດາຄົວເຮືອນແມ່ນ 0.45. ຕົວເລກດັ່ງ

**ກ່ອງ 4.10: ການສະສົມທຶນມະນຸດ ແລະ ຄວາມຂາດແຄນທຶນມະນຸດ: ຄຳນິຍາມ**

ຕາມຫຼັກການແລ້ວ, ຜົນລວມຂອງຈຳນວນປີການສຶກສາຂອງສະມາຊິກແຕ່ລະຄົນໃນຄົວເຮືອນໜຶ່ງ ທີ່ຊັ່ງນ້ຳໜັກຈາກອັດຕາສ່ວນຂອງຜົນຕອບແທນຂອງແຕ່ລະລະດັບການສຶກສາ ຄວນຈະເປັນຕົວແທນໃຫ້ແກ່ການສະສົມທຶນມະນຸດໄດ້ດີ. ເຖິງຢ່າງໃດກໍ່ຕາມ, ເຮົາບໍ່ມີຕົວເລກນ້ຳໜັກດັ່ງກ່າວ ແລະເປັນການຍາກທີ່ຈະຄິດໄລ່ຈາກຂໍ້ມູນທີ່ມີຢູ່. ດັ່ງນັ້ນ, ການສະສົມທຶນມະນຸດຂອງຄົວເຮືອນໜຶ່ງແມ່ນໄດ້ຄິດໄລ່ເອົາ ຜົນບວກ ຂອງຈຳນວນປີການສຶກສາຂອງສະມາຊິກແຕ່ລະຄົນໃນຄົວເຮືອນ.

1. ທຶນການສຶກສາແມ່ນຈຳນວນປີການສຶກສາຂອງສະມາຊິກໃນຄົວເຮືອນໜຶ່ງທີ່ມີອາຍຸແຕ່ 10 ປີ ແລະ ຫຼາຍກວ່າ (ການສຶກສາທົ່ວໄປ+ເຕັກນິກ). ສະເລ່ຍທຶນມະນຸດສະສົມຕໍ່ຫົວຄົນ ແມ່ນຈຳນວນລວມຂອງທຶນມະນຸດທັງໝົດ ຫານ ໃຫ້ປະຊາກອນໃນຄົວເຮືອນໜຶ່ງທີ່ມີອາຍຸແຕ່ 10 ປີ ຂຶ້ນໄປ.

2. ເສັ້ນກຳນົດຄວາມຂາດແຄນທຶນມະນຸດ ແມ່ນການສະສົມທຶນທີ່ຕ່ຳກວ່າຕົວເລກຖານຕ່ຳສຸດ (ປີການສຶກສາສະສົມແມ່ນ 2.06 ປີຕໍ່ຄົວເຮືອນ). ເສັ້ນຄວາມຂາດແຄນທຶນມະນຸດ ແມ່ນຄິດໄລ່ໂດຍອີງໃສ່ການອະທິບາຍດັ່ງລຸ່ມນີ້:

**ມາດຕະຖານທີ່ຕ້ອງການຕ່ຳສຸດ:** *ບຸກຄົນທີ່ມີອາຍຸ (ກ) ແຕ່10 -17 ປີ =4 ປີການສຶກສາ; (ຂ) ແຕ່18-25 ປີ=5 ປີການສຶກສາ; (ຄ) 26-40=2 ປີການສຶກສາ; (ງ) 41+=0 ປີການສຶກສາ, ຖ່ວງນ້ຳໜັກຕາມປະຊາກອນໃນແຕ່ລະກຸ່ມອາຍຸ.*

ເຫດຜົນຂອງການກຳນົດຕົວເລກດັ່ງກ່າວແມ່ນມີດັ່ງນີ້: ນະໂຍບາຍລັດຖະບານ ແລະ ເປົ້າໝາຍສະຫະສະວັດ (MDG) ແມ່ນແນໃສ່ເຮັດໃຫ້ຄົນທຸກຍາກຈົບການສຶກສາລະດັບປະຖົມ (ໝາຍຄວາມວ່າ 5 ປີ). ປະຊາກອນ ໃນກຸ່ມອາຍຸ (ກ) ຂ້າງເທິງນັ້ນ, ບາງຄົນອາດຈະຍັງບໍ່ທັນຈົບ 5 ປີ ແລະ ບາງຄົນກໍ່ຍັງສືບຕໍ່ຮຽນຢູ່. ນອກຈາກນີ້, ເດັກນ້ອຍບາງຄົນກໍ່ເລີ່ມເຂົ້າຮຽນຊ້າ, ຈຳນວນໜຶ່ງກໍ່ມີບັນຫາທາງດ້ານຮ່າງກາຍ ແລະ ຈິດໃຈ ແລະ ອື່ນໆ. ດັ່ງນັ້ນ, ປີການສຶກສາ 4 ປີ ກໍ່ຖືວ່າພຽງພໍແລ້ວ. ໃນກຸ່ມອາຍຸ (ຂ) ທຸກຄົນຄວນຈະສຳເລັດການສຶກສາ 5 ປີ ແລ້ວ ແລະ ແນ່ນອນວ່າບາງຄົນກໍ່ກາຍ 5 ປີ. ດັ່ງນັ້ນ, ບັນຫາສິ່ງທ້າທາຍທາງດ້ານຮ່າງກາຍ ແລະ ຈິດໃຈຈະຕັດຮອນກັບຜູ້ທີ່ຮຽນກາຍ 5 ປີ. ສ່ວນໃນກຸ່ມອາຍຸ (ຄ), ເກືອບໝົດທຸກຄົນແມ່ນຢູ່ໃນໄວຮຽນໃນໄລຍະຊຸມປີ 1970 ຫຼື ກ່ອນໜ້ານັ້ນ. ເນື່ອງຈາກສະພາບຂ້າມຜ່ານຢູ່ລາວໃນໄລຍະດັ່ງກ່າວນັ້ນ, ການສຶກສາພຽງ 2 ປີຢູ່ຊົນນະບົດໃນໄລຍະນັ້ນແມ່ນຖືວ່າພຽງພໍແລ້ວ. ໃນທີ່ສຸດ, ປະຊາກອນໃນກຸ່ມອາຍຸ (ງ) ທຸກຄົນຄວນຢູ່ໃນໄວຮຽນໃນໄລຍະກ່ອນປີ 1975. ເນື່ອງຈາກວ່າເຮົາບໍ່ຮູ້ສະພາບການສຶກສາຊົນນະບົດໃນຍຸກນັ້ນ ຈຶ່ງກຳນົດ 0 ປີ ການສຶກສາໃຫ້ແກ່ກຸ່ມນີ້.

69 ທ່ານ Psachropolous (1994); ທ່ານ Thomas, Wang ແລະ Fan (2005); ທ່ານ Moore ແລະ ຄົນອື່ນໆ (2007)

**ຮູບສະແດງ 4.13: ອັດຕາສ່ວນຄົວເຮືອນແຈກຢາຍຕາມສີ່ກຸ່ມລາຍຮັບໃນແຕ່ລະປະເພດບ້ານ-ຂະໜາດຂອງເນື້ອທີ່ດິນກະສິກຳ**




***ແຫຼ່ງຂໍ້ມູນ:*** *ການສຳຫຼວດແຮງງານຊົນນະບົດຂອງ NHDR ສົກປີ 2007-2008, ກົມສະຖິຕິ*

**ຕາຕະລາງ 4.11: ອັດຕາສ່ວນຄົວເຮືອນແຈກຢາຍຕາມຂະໜາດທີ່ດິນ ແລະ ປະເພດທີ່ດິນແບ່ງປັນໃນແຕ່ລະປະເພດບ້ານ**

| | ອັດຕາສ່ວນການແຈກຢາຍຄົວເຮືອນ | | | | | | | | | |
|---|---|---|---|---|---|---|---|---|---|---|
| | ບໍ່ມີດິນ | | ມີຮອດ 1 ຮ.ຕ. | | 1.10 ຫາ 2.50 ຮ.ຕ. | | 2.51 ຮ.ຕ. ແລະ ຫຼາຍ ກວ່າ | | ຂະໜາດສະເລ່ຍ/ ຄົວເຮືອນ (ຮ.ຕ.) | |
| | ເປັນເຈົ້າຂອງ | ຜະລິດກະສິກຳ | ເປັນເຈົ້າຂອງ | ຜະລິດກະສິກຳ | ເປັນເຈົ້າຂອງ | ຜະລິດກະສິກຳ | ເປັນເຈົ້າຂອງ | ຜະລິດກະສິກຳ | ເປັນເຈົ້າຂອງ | ຜະລິດກະສິກຳ |
| ຫັນປ່ຽນອາຊີບໃໝ່ | 2.6 | 2.6 | 16.8 | 18.8 | 42.4 | 40.8 | 38.2 | 37.7 | 3.0 | 3 |
| ອື່ນໆ | 14.8 | 9.8 | 15.1 | 16.9 | 28.6 | 38.7 | 41.5 | 34.6 | 2.7 | 2.3 |
| ບ້ານຈັດສັນໃໝ່ | 10.2 | 3.4 | 20.9 | 32.4 | 32.7 | 33.3 | 36.3 | 30.8 | 2.4 | 2.2 |
| ຕິດພັນກັບຕະຫຼາດ | 5.5 | 6.0 | 39.0 | 41.8 | 40.1 | 40.7 | 15.4 | 11.5 | 1.6 | 1.4 |
| ມີແຮງງານໄປເຮັດວຽກຢູ່ຕ່າງປະເທດ | 28.1 | 23.5 | 36.4 | 33.2 | 24.1 | 31.5 | 11.5 | 11.7 | 1.2 | 1.2 |
| ຍົກຍ້າຍຖິ່ນຖານ | 23.2 | 23.2 | 56.3 | 45.3 | 19.3 | 19.6 | 1.3 | 11.9 | 0.7 | 1.1 |
| ຕົວແທນທັງໝົດ | 15.4 | 11.8 | 28.5 | 29.8 | 29.6 | 33.8 | 26.5 | 24.7 | 2.0 | 1.9 |
| **ສຳປະສິດຈີນີ (ຄວາມບໍ່ເທົ່າທຽມກັນ) ໃນການຄອບຄອງທີ່ດິນ** | | | | | | | | | **0.54** | |
| **ສຳປະສິດຈີນີ (ຄວາມບໍ່ເທົ່າທຽມກັນ) ໃນເນື້ອທີ່ດິນກະສິກຳ** | | | | | | | | | **0.49** | |

**ຈຳນວນເນື້ອທີ່ດິນຕໍ່ການຄອບຄອງຕາມແຕ່ລະປະເພດບ້ານ**

| ຫັນປ່ຽນອາຊີບໃໝ່ | ອື່ນໆ | ກຸ່ມບ້ານຈັດສັນໃໝ່ | ຕິດພັນກັບຕະຫຼາດ | ມີແຮງງານໄປເຮັດວຽກຕ່າງປະເທດ | ຍົກຍ້າຍຖິ່ນຖານ | ຕົວແທນທັງໝົດ |
|---|---|---|---|---|---|---|
| 2.5 | 1.9 | 2.2 | 2.4 | 1.6 | 1.4 | 2.0 |

***ແຫຼ່ງຂໍ້ມູນ:*** *ການສຳຫຼວດແຮງງານຊົນນະບົດຂອງ NHDR ສົກປີ 2007-2008, ກົມສະຖິຕິ.*

**ຮູບສະແດງ 4.14: ເສັ້ນສະແດງການສະສົມທຶນມະນຸດຄິດໄລ່ຕາມຫົວຄົນຕໍ່ຄົວເຮືອນແບ່ງຕາມສີ່ກຸ່ມລາຍຮັບ**




***ແຫຼ່ງຂໍ້ມູນ:*** *ການສຳຫຼວດແຮງງານຊົນນະບົດຂອງ NHDR ສົກປີ 2007-2008, ກົມສະຖິຕິ.*

ກ່າວບໍ່ເປັນໜ້າແປກແຕ່ຢ່າງໃດ ຍ້ອນວ່າ ຕົວເລກເຫຼົ່ານີ້ຊີ້ໃຫ້ເຫັນວ່າພົນລະເມືອງໃນຊົນນະບົດໂດຍສະເລ່ຍມີລະດັບການສຶກສາຕ່ຳກວ່າລະດັບປະຖົມ.

ຖ້າເປັນແນວນີ້ຈະຮູ້ໄດ້ແນວໃດວ່າຕ້ອງໃຫ້ມີປີການສຶກສາຈັກປີຈຶ່ງຈະພຽງພໍ? ຖ້າໃຫ້ເໝາະສົມກັບຄວາມເປັນຈິງຫຼາຍຂຶ້ນ, ລະດັບການສະສົມທຶນມະນຸດທີ່ຕ້ອງການຕ່ຳສຸດໃນຄົວເຮືອນໃດໜຶ່ງແມ່ນມີຈັກປີ? ຄຳຕອບແມ່ນໄດ້ອະທິບາຍໄວ້ຢູ່ໃນຂໍ້ (2) ຂອງກ່ອງ 4.10: ການສະສົມທຶນມະນຸດ ຂອງຄົວເຮືອນຕໍ່ຫົວຄົນໃນເຂດຊົນນະບົດຂອງລາວເຮົາ (ສຳລັບປະຊາກອນອາຍຸແຕ່ 10 ປີຂຶ້ນໄປ) ຕ້ອງແມ່ນ 2.06 ປີ, ໃນນັ້ນ ມີຄົວເຮືອນສ່ວນໜ້ອຍຢູ່ຕ່ຳກວ່າ 'ເສັ້ນຄວາມຂາດແຄນທຶນມະນຸດ'. ໃນກຸ່ມຕົວແທນນີ້, ມີປະຊາກອນປະມານ 36.5% ຢູ່ຕ່ຳກວ່າເສັ້ນຄວາມຂາດແຄນທຶນມະນຸດ (ຕາຕະລາງ 4.12). ຄວາມຂາດແຄນທຶນມະນຸດມີລະດັບຂອບເຂດ ຕັ້ງແຕ່ 92% ຢູ່ເຂດບ້ານທີ່ຫັນປ່ຽນອາຊີບໃໝ່ໃນພາກເໜືອຫາລະດັບຕ່ຳປະມານ 10% ຢູ່ບ້ານທີ່ຕິດພັນກັບຕະຫຼາດ. ໃນກຸ່ມຊົນເຜົ່າໝວດ ພາສາຈີນ-ຕິເບດ ຕົວເລກດັ່ງກ່າວແມ່ນສູງກວ່າ 90%. ສ່ວນໃນກຸ່ມຊົນເຜົ່າໝວດພາສາມອນ-ຂະແມ ແລະ ມົ້ງ-ອິວມຽນ ກໍ່ຍັງມີຕົວເລກນີ້ສູງຢູ່ ແລະ ໃນກຸ່ມຊົນເຜົ່າໝວດພາສາລາວ-ໄຕ ແມ່ນມີໃນລະດັບປານກາງ.

ການສະສົມທຶນມະນຸດ ແລະ ລາຍຮັບມີຄວາມສຳພັນກັນຫຼາຍ (ຮູບສະແດງ 4.14). ດັ່ງນັ້ນ, ບໍ່ວ່າຈະຢູ່ໃນສັງຄົມຊົນນະບົດ ແລະ ກະສິກຳກໍ່ດີ, ທຶນມະນຸດແມ່ນປັດໄຈສຳຄັນທີ່ຊ່ວຍໃຫ້ປະຊາຊົນມີລາຍຮັບຫຼາຍຂຶ້ນ. ດັ່ງນັ້ນ, ຈຶ່ງຈຳເປັນຕ້ອງໄດ້ມີການລົງທຶນເຂົ້າໃສ່ການສ້າງຄວາມເຂັ້ມແຂງໃຫ້ແກ່ທຶນມະນຸດໃຫ້ຫຼາຍຂຶ້ນ.

ເປັນທີ່ຮູ້ກັນດີແລ້ວວ່າສະພາບການສຶກສາໃນປະເທດລາວເຮົາຍັງມີຂໍ້ຄົງຄ້າງຢູ່ຫຼາຍດ້ານ. ຂໍ້ມູນກ່ຽວກັບທຶນມະນຸດຊີ້ໃຫ້ເຫັນລະດັບຂອບເຂດຂອງບັນຫາ ແລະ ເຮັດໃຫ້ສາມາດວັດແທກຊ່ອງຫວ່າງລະຫວ່າງກຸ່ມຊົນເຜົ່າໝວດພາສາ ແລະ ທ້ອງຖິ່ນຕ່າງກັນ. ນອກຈາກຈະເອົາໃຈໃສ່ຕໍ່ການພັດທະນາບ້ານແລ້ວ, ສິ່ງດັ່ງກ່າວນີ້ຍັງເນັ້ນໜັກໃຫ້ເຫັນຄວາມຈຳເປັນໃນການສ້າງແຜນງານການພັດທະນາຕ່າງໆ ໂດຍແນເປົ້າໝາຍໃສ່ລະດັບຄົວເຮືອນ ແລະ ບຸກຄົນໃຫ້ຫຼາຍຂຶ້ນ ເພື່ອຮັບປະກັນເຮັດໃຫ້ການດຳລົງຊີວິດຂອງປະຊາຊົນໄດ້ຮັບການປັບປຸງ ແລະ ມີຄວາມເຂັ້ມແຂງຂຶ້ນ.

## ສະຫຼຸບຫຍໍ້:

1. *ການທີ່ມີສະພາບຄວາມບໍ່ເທົ່າທຽມກັນ ທາງດ້ານທີ່ດິນ ແລະ ການຂາດທີ່ດິນມີຜົນກະທົບໃນທາງລົບຕໍ່ການດຳລົງຊີວິດຂອງປະຊາຊົນ. ດັ່ງນັ້ນ, ຈຶ່ງຮຽກຮ້ອງໃຫ້ມີການສຶກສາຮອບດ້ານກ່ຽວກັບການເຄື່ອນເໜັງຂອງຕະຫຼາດທີ່ດິນ ແລະ ການນຳໃຊ້ທີ່ດິນ.*

2. *ປະຊາຊົນຢູ່ໃນບ້ານຕ່າງໆຕ້ອງສາມາດເຂົ້າເຖິງທີ່ດິນ ແລະ ຊັບພະຍາກອນການຜະລິດຕ່າງໆໄດ້. ໃນດ້ານນີ້, ຄວນສົ່ງເສີມໃຫ້ມີການນຳໃຊ້ທີ່ດິນ ໂດຍການຜະລິດ ກະສິກຳແບບຄອບຄົວ ເພາະຈະມີຜົນດີກວ່າການຜະລິດກະສິກຳຂະໜາດໃຫຍ່ພາຍໃຕ້ການຄຸ້ມຄອງຂອງບໍລິສັດ.*

3. *ນອກຈາກສິດທິມະນຸດແລ້ວ, ການສຶກສາກໍ່ແມ່ນປັດໄຈສຳຄັນຫຼາຍໃນການເພີ່ມຄວາມສາມາດໃນ ການມີວຽກເຮັດງານທຳຂອງປະຊາຊົນ ແລະ ຍົກສູງຄຸນນະພາບຂອງການດຳລົງຊີວິດຂອງເຂົາເຈົ້າ. ສະພາບຄວາມ ເປັນຈິງຂອງການສະສົມທຶນມະນຸດຕ່ຳ ແລະ ຄວາມບໍ່ເທົ່າທຽມກັນດ້ານທຶນມະນຸດສູງໄດ້ຮຽກຮ້ອງໃຫ້ເອົາໃຈໃສ່ຍົກລະດັບການສຶກສາຢູ່ເຂດຊົນນະບົດໃຫ້ສູງຂຶ້ນ. ນອກນັ້ນ ກໍ່ຍັງມີຄວາມຈຳເປັນຕ້ອງເອົາໃຈໃສ່ ແກ້ໄຂບັນຫາສະພາບການມີທຶນມະນຸດຕ່ຳ ໂດຍສະເພາະຢູ່ໃນກຸ່ມຊົນເຜົ່າໝວດພາສາຈີນ-ຕິເບດ.*

**ກ່ອງ 4.11: ອະທິບາຍຄວາມແຕກຕ່າງທາງດ້ານລາຍຮັບ**

ການວິໄຈຢູ່ໃນບົດທີ່ໄດ້ກ່າວມາຂ້າງເທິງນັ້ນຊີ້ໃຫ້ເຫັນວ່າ ຕົວປ່ຽນຕ່າງໆຂ້າງລຸ່ມນີ້ອາດກະທົບຕໍ່ລາຍຮັບໄດ້:

1. *ຈຳນວນປະເພດແຫຼ່ງລາຍຮັບ:* ຈຳນວນແຫຼ່ງລາຍຮັບ ແລະ ຄວາມຫຼາກຫຼາຍຂອງອາຊີບການງານມີຜົນໃນການກຳນົດຂະໜາດລາຍຮັບໃນສັງຄົມກະສິກຳ.
2. *ອັດຕາການເອື່ອຍອີງທາງດ້ານເສດຖະກິດ:* ຄົວເຮືອນທີ່ມີຄົນຫາລາຍໄດ້ໜ້ອຍກວ່າມີລາຍຮັບຕໍ່ຫົວຄົນຕໍ່າກວ່າ ແລະ ຄົວເຮືອນທີ່ມີຈຳນວນຄົນຫາລາຍໄດ້ຫຼາຍກວ່າຈະມີລາຍຮັບຕໍ່ຫົວຄົນສູງກວ່າ.
3. *ການສະສົມທຶນມະນຸດ:* ທຶນມະນຸດ ແລະ ລາຍຮັບມີຄວາມສຳພັນກັນສູງ-ແຮງງານທີ່ມີການສຶກສາດີຈະໄດ້ລາຍຮັບຫຼາຍກວ່າ.
4. *ການເຂົ້າເຖິງທີ່ດິນກະສິກຳ:* ຜູ້ບໍ່ມີທີ່ດິນກະສິກຳ ແລະ ຜູ້ຄອບຄອງທີ່ດິນລາຍນ້ອຍມີລາຍຮັບໜ້ອຍກວ່າ, ສ່ວນຜູ້ມີທີ່ດິນກະສິກຳ ແລະ ຜູ້ຄອບຄອງທີ່ດິນລາຍໃຫຍ່ມີລາຍຮັບຫຼາຍກວ່າ.
5. *ການຫວ່າງງານ:* ການບໍ່ມີວຽກເຮັດງານທຳແມ່ນສາເຫດສຳຄັນທີ່ເຮັດໃຫ້ມີລາຍຮັບຕໍ່າ ຫຼື ບໍ່ມີລາຍຮັບ.
6. *ຜະລິດຕະພາບສູງກວ່າ:* ລາຍຮັບສູງຖ້າວ່າທີ່ດິນຖືກນຳໃຊ້ຫຼາຍກວ່າ ແລະ ມີປະສິດທິພາບຫຼາຍກວ່າ (ມັນເຮັດໃຫ້ມີປະລິມານຜົນຜະລິດ ແລະ ລາຍຮັບສູງກວ່າ), ແລະ ໃນທາງກົງກັນຂ້າມກໍ່ເຊັ່ນດຽວກັນ.
7. *ການໂດດດ່ຽວທາງດ້ານທີ່ຕັ້ງພູມສັນຖານ:* ຜູ້ທີ່ອາໄສຢູ່ໃນເຂດຫ່າງໄກສອກຫຼີກ, ເຮັດວຽກຢູ່ໃນພື້ນທີ່ດິນມີຄວາມອຸດົມສົມບູນຕໍ່າ ແລະ ມີໂອກາດເຂົ້າເຖິງຕະຫຼາດໄດ້ໜ້ອຍຈະມີລາຍຮັບໜ້ອຍ.

ເພື່ອວັດແທກຄວາມແຕກຕ່າງ ຂອງລາຍຮັບຕໍ່ຫົວຄົນ ຈາກບັນດາຕົວປ່ຽນຕ່າງໆ ໃນກອບການວິເຄາະແບບຫຼາຍຕົວປ່ຽນຂ້າງເທິງນັ້ນ ເພິ່ນໄດ້ນຳໃຊ້ແບບຈຳລອງ ການຄິດໄລ່ຄວາມສຳພັນ ລະຫວ່າງ ຄ່າສະເລ່ຍຂອງຫຼາຍຕົວປ່ຽນທີ່ໃກ້ຄຽງກັນ. ສົມຜົນທີ່ສ້າງຂຶ້ນ ຂ້ອນຂ້າງສະທ້ອນໃຫ້ເຫັນຂໍ້ມູນຕົວຈິງໄດ້ດີຍ້ອນວ່າ ສຳປະສິດທຸກຕົວສະແດງໃຫ້ເຫັນຄວາມໝາຍສຳຄັນທາງດ້ານສະຖິຕິ. ການສັງເກດເບິ່ງຄວາມສຳພັນ ໂດຍໃຊ້ຕົວປ່ຽນອິດເອກະລາດຕົວດຽວກ່ອນໜ້ານີ້ເຫັນວ່າ ມີຄວາມສອດຄ່ອງດີຢູ່ໃນກອບການວິເຄາະແບບຫຼາຍຕົວປ່ຽນ (ເອກະສານຊ້ອນທ້າຍ 4.2).

**ຕາຕະລາງ 4.12: ຄວາມຂາດແຄນທຶນມະນຸດໃນແຕ່ລະປະເພດບ້ານ ແລະ ກຸ່ມຊົນເຜົ່າ**

| ເຂດ | ອັດຕາສ່ວນທຶນມະນຸດຂອງຄົວເຮືອນທຸກຍາກ |
|---|---|
| ຫັນປ່ຽນອາ ຊີບໃໝ່ | 91.6 |
| ອື່ນໆ | 17.8 |
| ຍົກຍ້າຍຖິ່ນຖານ | 46.0 |
| ຕິດພັນຕ ຫຼາດ | 9.9 |
| ມີແຮງງານໄປເຮັດວຽກຢູ່ຕ່າງປະເທດ | 13.2 |
| ຍົກຍ້າຍຖິ່ນຖານ | 65.3 |
| ຕົວແທນທັງໝົດ | 36.5 |

| ກຸ່ມຊົນເຜົ່າ ຕາມໝວດພາສາ | ອັດຕາສ່ວນທຶນມະນຸດຂອງຄົວເຮືອນທຸກຍາກ |
|---|---|
| ລາວ-ໄຕ | 23.1 |
| ມອນ-ຂະແມ | 46.9 |
| ຈີນ-ຕິເບດ | 93.2 |
| ມົ້ງ-ອິວມຽນ | 40.9 |

***ແຫຼ່ງຂໍ້ມູນ:*** *ການສຳຫຼວດແຮງງານຊົນນະບົດຂອງ NHDR ສົກປີ 2007-2008, ກົມສະຖິຕິ.*

## ການປ່ຽນແປງການດຳລົງຊີວິດຂອງຊາວບ້ານ: ຂໍ້ສັງເກດຈາກການເກັບກຳຂໍ້ມູນພາກສະໜາມ

ການສຶກສາກ່ຽວກັບການດຳລົງຊີວິດຂອງປະຊາຊົນແມ່ນວິທີການໜຶ່ງທີ່ມີປະສິດທິຜົນ ໃນການສື່ຂໍ້ມູນຂ່າວສານທີ່ສຳຜັດໄດ້ ເຖິງຄວາມເປັນມະນຸດໃຫ້ຄົນເຮົາສາມາດເຂົ້າໃຈໄດ້ດີ ຊຶ່ງເປັນສິ່ງທີ່ຕົວເລກສະຖິຕິບໍ່ສາມາດເຮັດຢ່າງມີປະສິດທິຜົນໄດ້. ພາກນີ້ ຈະສະເໜີຜົນສະຫຼຸບ ຂອງການປຶກສາຫາລື ກ່ຽວກັບປະເດັນສຳຄັນ 7 ຂໍ້ ທີ່ໄດ້ຮັບຟັງຈາກການປະຊຸມພົບປະຂອງຊາວບ້ານ.

### ບັນຫາໃນການໂຮມບ້ານຄືນໃໝ່

ລັດຖະບານໄດ້ຈັດຕັ້ງປະຕິບັດການຈັດສັນບ້ານຕ່າງໆທີ່ຕັ້ງຢູ່ກະແຈກກະຈາຍຄືນໃໝ່, ໂດຍສະເພາະບ້ານທີ່ຢູ່ໃນເຂດພູດອຍເພື່ອສ້າງ ບ້ານທີ່ມີຂະໜາດເໝາະສົມ ແລະ ຖາວອນທີ່ສາມາດຕອບສະໜອງພື້ນຖານໂຄງລ່າງໄດ້ເຊັ່ນ: ການສຶກສາ, ສາທາລະນະສຸກ ແລະ ຖະໜົນຫົນທາງເຊື່ອມຕໍ່. ແຜນງານດັ່ງກ່າວສ້າງຄວາມເພິ່ງພໍໃຈໃຫ້ແກ່ປະຊາຊົນຢູ່ໃນບ້ານທີ່ຖືກຈັດກຸ່ມໃໝ່ໂດຍສະເພາະໃນດ້ານພື້ນຖານໂຄງລ່າງ. ເຖິງຢ່າງໃດກໍ່ຕາມ, ຢູ່ໃນບ້ານຈັດສັນກຸ່ມໃໝ່ນັ້ນເຂົາເຈົ້າຍັງມີຄວາມກັງວົນໃຈກັບຂໍ້ຈຳກັດໃນດ້ານການທຳມາຫາກິນ ແລະ ຄວາມບໍ່ໝັ້ນຄົງດ້ານສະບຽງອາຫານ.

*ບັນຫາຕ່າງໆລວມມີດັ່ງຕໍ່ໄປນີ້,* ບັນຫາທີໜຶ່ງ, ທີ່ດິນກະສິກຳທີ່ແບ່ງປັນໃຫ້ແກ່ຄົວເຮືອນໃນບ້ານທີ່ຖືກຈັດກຸ່ມໃໝ່ໃນຫຼາຍກໍລະນີມີເນື້ອທີ່ນ້ອຍບໍ່ພໍກັບຄວາມຕ້ອງການຂອງເຂົາເຈົ້າ ແລະ ການແບ່ງປັນກໍ່ບໍ່ເທົ່າທຽມກັນ. ນອກຈາກນີ້, ດິນບາງຕອນກໍ່ຍັງຢູ່ຫ່າງໄກ

ຈາກບ້ານ, ບາງຕອນກໍ່ຂາດແຫຼ່ງນ້ຳ ແລະ ສ່ວນໃຫຍ່ກໍ່ເປັນດິນບໍ່ອຸດົມສົມບູນ. ສິ່ງສຳຄັນທີ່ສຸດ, ຊາວກະສິກອນທີ່ມາຈາກເຂດພູດອຍຍັງບໍ່ທັນຄຸ້ນເຄີຍກັບການຜະລິດກະສິກຳຢູ່ເຂດທົ່ງພຽງ. ດັ່ງນັ້ນ, ກ່ອນທີ່ເຂົາເຈົ້າຈະສາມາດສ້າງລາຍຮັບໃຫ້ໄດ້ໃນລະດັບເກົ່າກ່ອນການຍົກຍ້າຍມາຢູ່ໃນກຸ່ມບ້ານໃໝ່ກໍ່ຈະຕ້ອງໃຊ້ເວລາດົນສົມຄວນ.

*ບັນຫາທີສອງ,* ປະຊາຊົນທີ່ມາຈາກພື້ນຖານດ້ານວັດທະນະທຳແຕກຕ່າງກັນ (ກຸ່ມຊົນເຜົ່າ) ໄດ້ຖືກຈັດໃຫ້ມາຢູ່ຮ່ວມກັນ. ໃນດ້ານຫຼັກການແລ້ວ, ການເຕົ້າໂຮມເອົາຫຼາຍກຸ່ມວັດທະນະທຳມາຢູ່ຮ່ວມກັນເປັນສິ່ງທີ່ດີ. ເຖິງຢ່າງໃດກໍ່ຕາມ, ໃນຕົວຈິງແລ້ວຍັງເຫັນວ່າການຮ່ວມມື ແລະ ການຕິດຕໍ່ພົວພັນກັນລະຫວ່າງກຸ່ມຕ່າງໆທີ່ມາຢູ່ຮ່ວມກັນນັ້ນຍັງບໍ່ທັນດີ ແລະ ແໜ້ນແກ່ນ. ກຸ່ມຕ່າງໆທີ່ຢູ່ຮ່ວມກັນນັ້ນຍັງຂາດລະບຽບຫຼັກການທີ່ເປັນເອກະພາບກັນເພື່ອເປັນບ່ອນອີງໃຫ້ແກ່ການແກ້ໄຂບັນຫາຂໍ້ຂັດແຍ້ງທາງດ້ານສິດຜົນປະໂຫຍດໃນການນຳໃຊ້ທີ່ດິນ ແລະ ຊັບສິນສາທາລະນະຕ່າງໆ. ທັງນີ້ກໍ່ຍ້ອນວ່າພາສາ, ຮີດຄອງປະເພນີ, ວິທີການແກ້ໄຂຂໍ້ຂັດແຍ້ງຂອງແຕ່ລະກຸ່ມຊົນເຜົ່າແຕກຕ່າງກັນ. ມີກໍລະນີໜຶ່ງ ທີ່ອຳນາດການປົກຄອງ ໄດ້ອອກຄຳສັ່ງໃຫ້ຊາວບ້ານທີ່ຢູ່ກ່ອນ ແບ່ງປັນດິນກະສິກຳບາງສ່ວນໃຫ້ແກ່ຜູ້ທີ່ມາຢູ່ໃໝ່, ແຕ່ເມື່ອອຳນາດການປົກຄອງບໍ່ຢູ່ ຫຼື ບໍ່ໄດ້ຕິດຕາມກວດກາຢ່າງໃກ້ຊິດ, ຊາວບ້ານກໍ່ບໍ່ໄດ້ແບ່ງປັນດິນຕາມຄຳສັ່ງ. ຜູ້ທີ່ມາຢູ່ໃໝ່ບໍ່ຮູ້ວ່າຈະໃຊ້ວິທີໃດເພື່ອຕໍ່ລອງແກ້ໄຂບັນຫາດັ່ງກ່າວ. ດັ່ງນັ້ນ, ເຂົາເຈົ້າຈຶ່ງຍັງບໍ່ມີທີ່ດິນທຳມາຫາກິນຢູ່ຄືເກົ່າ. ການຂາດທີ່ດິນມີຜົນກະທົບຕໍ່ລາຍຮັບ ແລະ ສຸຂະພາບຂອງປະຊາຊົນ, ກະທົບຕໍ່ການສຶກສາຂອງເດັກນ້ອຍ ແລະ ສຳຄັນທີ່ສຸດກໍ່ແມ່ນກະທົບຕໍ່ຄວາມເຊື່ອໝັ້ນໃນຕົນເອງຢູ່ໃນບ້ານ.

*ບັນຫາທີສາມ,* ການຈັດສັນບ້ານໃໝ່ ເຮັດໃຫ້ຄວາມໜາແໜ້ນຂອງປະຊາກອນໃນບ້ານໃໝ່ສູງຂຶ້ນ. ປ່າໄມ້, ເຄື່ອງປ່າຂອງດົງ, ສັດປ່າ ແລະ ອື່ນໆທີ່ເປັນອາຫານເພີ່ມປະຈຳວັນຂອງເຂົາເຈົ້າ ຈະຄ່ອຍໆມີໜ້ອຍລົງ ຖ້າທຽບຕໍ່ຫົວຄົນ. ນອກຈາກບັນຫາ ກ່ຽວກັບຄວາມແໜ້ນໜາຂອງປະຊາກອນແລ້ວ, ວິທີການຂຸດຄົ້ນນຳໃຊ້ຊັບພະຍາກອນສ່ວນຮວມ ໃນແຕ່ລະກຸ່ມຊົນເຜົ່າກໍ່ແຕກຕ່າງກັນໄປຊຶ່ງເຫັນໄດ້ຈາກບັນຫາຂໍ້ຂັດແຍ່ງທີ່ເກີດຂຶ້ນ ໃນລະຫວ່າງກຸ່ມຊົນເຜົ່າດ້ວຍກັນ. ໃນບ້ານທີ່ໄດ້ເຂົ້າໄປສຳຫຼວດ, ໃນກໍລະນີມີຂໍ້ຂັດແຍ່ງກັນຊາວບ້ານຫຼາຍຄົນ ທີ່ມາອາໄສຢູ່ໃໝ່ ມັກຈະເປັນຝ່າຍເສຍປຽບໃຫ້ແກ່ຜູ້ທີ່ມີຊີວິດການເປັນຢູ່ດີກວ່າ ຊຶ່ງສ່ວນໃຫຍ່ ເປັນຜູ້ທີ່ມີພື້ນຖານແໜ້ນໜາມາກ່ອນແລ້ວ ຊຶ່ງບໍ່ຄ່ອຍໄດ້ຮັບຜົນກະທົບຫຼາຍປານໃດ ເພາະວ່າເຂົາເຈົ້າບໍ່ໄດ້ເອື່ອຍອີງໃສ່ປ່າໄມ້ຫຼາຍ. ຜູ້ທີ່ໄດ້ຮັບຜົນກະທົບຫຼາຍສ່ວນຫຼາຍ ກໍ່ແມ່ນຊາວບ້ານທຸກຍາກທີ່ມາອາໄສຢູ່ໃໝ່ ຍ້ອນວ່າ ເຂົາເຈົ້າອາໄສແຫຼ່ງຊັບພະຍາກອນປ່າໄມ້ຫຼາຍກວ່າ.

*ບັນຫາທີສີ່,* ເງິນສົດເປັນປັດໄຈສຳຄັນຕໍ່ການດຳລົງຊີວິດຂອງຊາວບ້ານໃນເຂດທົ່ງພຽງ. ຊາວບ້ານທີ່ມາອາໄສຢູ່ໃໝ່ເຮັດວຽກຮັບຈ້າງໃນເຂດກະສິກຳ ໃຫ້ແກ່ຜູ້ທີ່ຢູ່ກ່ອນ ຊຶ່ງບັນຫານີ້ ເຮັດໃຫ້ເກີດການແຕກແຍກກັນລະຫວ່າງສອງກຸ່ມຄົນດັ່ງກ່າວ.

*ສັງລວມແລ້ວ,* ຜູ້ທີ່ມາອາໄສຢູ່ໃໝ່ຍັງບໍ່ທັນຄຸ້ນເຄີຍກັບແບບແຜນການດຳລົງຊີວິດຢູ່ທົ່ງພຽງ ແລະ ເຂົາເຈົ້າຈະຕົກຢູ່ໃນສະພາບມີໜີ້ສິນໄດ້ໄວ ເນື່ອງຈາກວ່າເຂົາເຈົ້າຕ້ອງໄດ້ເພິ່ງພາອາໄສຕະຫຼາດຫຼາຍຂຶ້ນ ແລະ ອາໄສ 'ຊັບພະຍາກອນທຳມະຊາດ' ໜ້ອຍລົງ. ນອກຈາກນີ້ແລ້ວ, 'ສິນຄ້າຕ່າງໆໃນຕົວເມືອງ' ກໍ່ເປັນສິ່ງລໍ້ໃຈໃຫ້ເຂົາເຈົ້າເກີດມີຄວາມຢາກໄດ້.

**ກ່ອງ 4.12: ສິ່ງທີ່ມີຢູ່ບໍ່ພໍພຽງສຳລັບການດຳລົງຊີວິດ**

ຂ້ອຍໄດ້ເຂົ້າ 30 ກິໂລ ຈາກໂຄງການຕໍ່ເດືອນ ສຳລັບໜຶ່ງປີ. ຂ້ອຍຍັງໄດ້ເຮືອນໜຶ່ງຫຼັງ, ທີ່ດິນ 0.6 ເຮັກຕາ, ອຸປະກອນຮັບໃຊ້ການຜະລິດກະສິກຳຈຳນວນໜຶ່ງ, ເງິນອຸດໜູນໃຫ້ຄອບຄົວ ແລະ ເງິນສົດອີກຈຳນວນ 800,000 ກີບເພື່ອສ້າງຕູບຢູ່. ແຕ່ວ່າໃນປີນີ້, ເນື້ອທີ່ດິນ 0.6 ເຮັກຕາ ດັ່ງກ່າວໃຫ້ຜົນຜະລິດເຂົ້າໄດ້ພຽງແຕ່ 30 ກິໂລ ແລະ ບໍລິສັດກໍ່ຢຸດຈ່າຍເຂົ້າໃຫ້ແລ້ວ. ຊີວິດຢູ່ບ້ານໃໝ່ນີ້ຖືວ່າດີ: ມີນ້ຳໃຊ້, ມີໄຟຟ້າ ແລະ ສາມາດເຂົ້າເຖິງຖະໜົນຫົນທາງໄດ້, ແຕ່ວ່າຂ້ອຍວາງແຜນຈະຊອກຫາດິນກະສິກຳຢູ່ບ່ອນອື່ນເພາະວ່າດິນຕອນນີ້ບໍ່ມີຄວາມອຸດົມສົມບູນເລີຍ. ຫຼັງຈາກນັ້ນ, ຂ້ອຍຕ້ອງໄດ້ວາງແຜນ ເພື່ອຊອກຫາອາຫານມາລ້ຽງຄອບຄົວຂອງຂ້ອຍ ແລະ ຂ້ອຍເອງ. ຊີວິດຢູ່ບ້ານເກົ່າອາດຈະບໍ່ສະດວກສະບາຍຄືຢູ່ບ່ອນນີ້ເພາະບໍ່ມີພື້ນຖານໂຄງລ່າງ, ແຕ່ວ່າຂ້ອຍກໍ່ສາມາດປູກເຂົ້າໄດ້ດີ ແລະ ມີຊັບພະຍາກອນທຳມະຊາດ ທີ່ສາມາດເຂົ້າເຖິງໄດ້. ດັ່ງນັ້ນ, ຜ່ານມາຂ້ອຍຈຶ່ງບໍ່ເຄີຍມີບັນຫາເລື່ອງສະບຽງອາຫານເລີຍ.

***ນາງ ໂພສີ, ຜູ້ຍົກຍ້າຍຖິ່ນຖານໄປຢູ່ ບ້ານ ໂພນສາອອນ, ເມືອງ ນາກາຍ, ແຂວງ ຄຳມ່ວນ. ການສຳຫຼວດ, ເດືອນ ມີນາ 2008.***

## ບັນຫາໃນບ້ານຕັ້ງຖິ່ນຖານໃໝ່

ໃນເຂດທີ່ມີການຈັດຕັ້ງປະຕິບັດໂຄງການໃຫຍ່ ເຊັ່ນ: ໂຄງການສວນປູກຕົ້ນໄມ້ຂະໜາດໃຫຍ່, ບໍ່ແຮ່ ຫຼື ອ່າງເກັບນ້ຳສຳລັບເຂື່ອນຜະລິດພະລັງງານໄຟຟ້າ, ປະຊາຊົນທີ່ອາໄສຢູ່ເຂດດັ່ງກ່າວກ່ອນໜ້ານັ້ນ ໄດ້ຍົກຍ້າຍໄປຕັ້ງຖິ່ນຖານຢູ່ບ່ອນໃໝ່. ການຕັ້ງຖິ່ນຖານໃໝ່ນີ້ແນ່ນອນວ່າຕ້ອງເກີດຄ່າໃຊ້ຈ່າຍ ແລະສິ່ງຜົນກະທົບຕໍ່ປະຊາຊົນໃນເຂດອ້ອມແອ້ມໂຄງການໃຫ້ເກີດຄວາມເສຍຫາຍຢ່າງຫຼວງຫຼາຍ. ໃນດ້ານໜຶ່ງ, ເຖິງວ່າ ປະຊາຊົນທີ່ຖືກຍົກຍ້າຍມາຕັ້ງຖິ່ນຖານໃໝ່ນີ້ຈະໄດ້ຮັບຄວາມສະດວກສະບາຍ ແລະ ເພິ່ງພໍໃຈຕໍ່ສິ່ງອຳນວຍຄວາມສະດວກດ້ານພື້ນຖານໂຄງລ່າງກໍ່ຕາມ, ແຕ່ໃນດ້ານການດຳລົງຊີວິດຂອງເຂົາເຈົ້າກໍ່ຍັງເປັນບັນຫາໜ້າເປັນຫ່ວງຢູ່. ບັນຫາຕ່າງໆເຫຼົ່ານັ້ນລວມມີດັ່ງລຸ່ມນີ້:

ໃນບ້ານໜຶ່ງຢູ່ແຂວງຄຳມ່ວນ, ປະຊາຊົນຕັ້ງຖິ່ນຖານໃໝ່ ໄດ້ຮັບການຊົດເຊີຍຕ່າງໆດ້ວຍດິນກະສິກຳ, ເງິນ ແລະ/ຫຼື ເຂົ້າ (ສຳລັບໜຶ່ງປີ). ເຖິງຢ່າງໃດກໍ່ຕາມ, ການຊົດເຊີຍດັ່ງກ່າວ ຫຼາຍກໍລະນີຍັງບໍ່ພຽງພໍທີ່ຈະເຮັດໃຫ້ຊີວິດການເປັນຢູ່ຂອງເຂົາເຈົ້າກັບຄືນສູ່ສະພາບປົກກະຕິຄືກັບໄລຍະກ່ອນໜ້າການຍົກຍ້າຍ. ຊາວກະສິກອນບາງຄົນກໍ່ໂຊກດີທີ່ໄດ້ດິນອຸດົມສົມບູນແດ່ ແຕ່ສ່ວນບາງຄົນກໍ່ໄດ້ຮັບດິນບໍ່ດີຈົນເຖິງຂັ້ນວ່າຫຍ້າ ກໍ່ຍັງບໍ່ສາມາດເກີດໄດ້ໃນດິນດັ່ງກ່າວ ຊຶ່ງສົ່ງຜົນໃຫ້ເຂົາເຈົ້າຕ້ອງປະສົບບັນຫາກັບຄວາມບໍ່ໝັ້ນຄົງດ້ານສະບຽງອາຫານ. ໃນບາງກໍລະນີ, ປະຊາຊົນກໍ່ຍັງບໍ່ທັນໄດ້ຮັບການແບ່ງປັນທີ່ດິນໃຫ້ເທື່ອ! ໃນຕົວຈິງແລ້ວ, ປະກົດວ່າມີພື້ນທີ່ປ່າໄມ້ ຈຳນວນໜຶ່ງກຳລັງໄດ້ຮັບການບຸກເບີກ ແລະ ກະກຽມເພື່ອຈັດສັນຊົດເຊີຍໃຫ້ແກ່ຊາວບ້ານ. ແຕ່ເຖິງຢ່າງໃດກໍ່ຕາມ, ສ່ວນໃຫຍ່ດິນທີ່ໄດ້ມາແມ່ນປ່າເລົ່າຊຶ່ງເປັນດິນຂາດຄວາມອຸດົມສົມບູນ. ພ້ອມກັນນັ້ນ, ການທຳລາຍປ່າໄມ້ ກໍ່ເປັນການທຳລາຍລະບົບນິເວດຊຶ່ງປະຊາຊົນເອງກໍ່ຮູ້ບັນຫານີ້ດີ. ດ້ານໜຶ່ງອີກ, ຜູ້ມາຕັ້ງຖິ່ນຖານໃໝ່ ກໍ່ມັກຈະຈັບຈ່າຍເງິນ ທີ່ໄດ້ຈາກການຊົດເຊີຍເຂົ້າໃນ

**ກ່ອງ 4.13: ກໍລະນີຕ່າງໆຂອງສະພາບນ້ຳເສຍ**

**ກໍລະນີທີ 1** ນາງ ດາຄຳ ພ້ອມດ້ວຍຄອບຄົວ ອາໄສຢູ່ເຮືອນທີ່ສ້າງດ້ວຍໄມ້ໄຜ່ ໃນບ້ານ ຫຼວງພະຄຳ, ແຂວງຫຼວງນ້ຳທາ. ຄອບຄົວຂອງລາວດຳລົງຊີບຢູ່ໂດຍອາໄສລາຍຮັບເສີມທີ່ໄດ້ຈາກການເກັບ ແລະ ຂາຍໄຄນ້ຳ ໃຫ້ແກ່ພໍ່ຄ້າຈາກພະມ້າ ແລະ ຕະຫຼາດໃກ້ຄຽງ. ໃນໄລຍະນັ້ນ, ນາງ ດາຄຳ ພຽງແຕ່ຍ່າງລົງໄປແມ່ນ້ຳທີ່ຢູ່ໃກ້ໆ ລາວກໍ່ສາມາດເກັບໄຄນ້ຳໄດ້ພຽງພໍໃນໜຶ່ງຊົ່ວໂມງ. ກິດຈະກຳດັ່ງກ່າວ ເຮັດໃຫ້ລາວສາມາດຊື້ອາຫານເພີ່ມ ແລະ ສິ່ງຈຳເປັນຕ່າງໆສຳລັບຄອບຄົວໄດ້.

ສາມປີກ່ອນ, ບໍລິສັດຂຸດຄົ້ນທອງແດງ ໄດ້ເລີ່ມການຂຸດຄົ້ນ ແລະ ຜະລິດຢູ່ໃກ້ກັບບ້ານ. ຍ້ອນບໍລິສັດດັ່ງກ່າວ ລະບາຍສິ່ງໂສໂຄກລົງສູ່ແມ່ນ້ຳ, ຈຶ່ງເຮັດໃຫ້ຈຳນວນປາໃນແມ່ນ້ຳດັ່ງກ່າວຫຼຸດໜ້ອຍລົງ ແລະ ປະຊາຊົນທີ່ໃຊ້ນ້ຳໃນແມ່ນ້ຳມາດື່ມກໍ່ເລີ່ມມີບັນຫາເຈັບທ້ອງ. ນາງດາຄຳ ແລະ ຊາວບ້ານຄົນອື່ນໆບໍ່ສາມາດເກັບໄຄນ້ຳຈາກເຂດໃກ້ຄຽງໄດ້ອີກຕໍ່ໄປ ເນື່ອງຈາກວ່າໄຄນ້ຳໃນເຂດນັ້ນເປັນພິດ. ດັ່ງນັ້ນ, ປະຈຸບັນ ລາວຈຳເປັນຕ້ອງຂີ່ລົດລົດຈັກຂຶ້ນໄປເໜືອແມ່ນ້ຳ 20 ກິໂລແມດ ເພື່ອເກັບໄຄນ້ຳ. ລາວຈົ່ມວ່າສະພາບດັ່ງກ່າວເຮັດໃຫ້ລາວຕ້ອງມີຄ່າໃຊ້ຈ່າຍຕື່ມເພື່ອຊື້ນ້ຳມັນລົດ ແລະ ຕ້ອງເສຍເວລາຫຼາຍຂຶ້ນກວ່າຈະໄດ້ລາຍຮັບເທົ່າເກົ່າ.

**ກໍລະນີທີ 2** ບ້ານພົງງ່າ ຢູ່ເມືອງວິລະບູລີ ແຂວງສະຫວັນນະເຂດ ແມ່ນໜຶ່ງໃນຫົກບ້ານທີ່ຢູ່ໃນບໍລິເວນເຂດຂຸດຄົ້ນຂອງບໍລິສັດຂຸດຄົ້ນບໍ່ແຮ່ລ້ານຊ້າງມີເນີໂຣນ. ບໍລິສັດດັ່ງກ່າວນີ້ເປັນບໍລິສັດໃຫຍ່ທີ່ສຸດດ້ານການຂຸດຄົ້ນ, ປຸງແຕ່ງທອງ ແລະ ຄຳໃນລາວໄດ້ອ້າງວ່າຫຼັງຈາກທີ່ໄດ້ມີການປຸງແຕ່ງໂລຫະແລ້ວ, ທາງບໍລິສັດໄດ້ບຳບັດນ້ຳເສຍໃຫ້ສະອາດກ່ອນປ່ອຍລົງສູ່ແມ່ນ້ຳ/ບຶງໃກ້ຄຽງ; ດັ່ງນັ້ນ, ນ້ຳໃນແມ່ນ້ຳຈຶ່ງບໍ່ເປື້ອນເປິ ແລະ ເປັນພິດ. ມາຮອດປະຈຸບັນ, ຊາວບ້ານທີ່ເຄີຍໃຊ້ນ້ຳຈາກບຶງໃນເມື່ອກ່ອນບໍ່ກ້າດື່ມນ້ຳຈາກບຶງອີກແລ້ວ ເພາະຢ້ານວ່ານ້ຳອາດຈະເປື້ອນເປິ ແລະ ເປັນພິດ. ເນື່ອງຈາກຊຸມຊົນແຫ່ງນີ້ເຄີຍເປັນເຂດຂຸດຄົ້ນຄຳຂະໜາດນ້ອຍ ຈາກພື້ນນ້ຳໃນສະໄໝຫຼາຍສິບປີມາກ່ອນແລ້ວ, ຊາວບ້ານຈຶ່ງຮູ້ຈັກດີວ່າທາດເຫຼັກເປັນພິດນັ້ນເປັນຄືແນວໃດ. ໃນປະຈຸບັນນີ້, ເຂົາເຈົ້າຈຶ່ງໃຊ້ນ້ຳຈາກແມ່ນ້ຳສະເພາະແຕ່ອາບ ແລະ ຈຸດປະສົງອື່ນເທົ່ານັ້ນແຕ່ບໍ່ໃຊ້ດື່ມ. ຊາວບ້ານແຫ່ງນີ້ ຊື້ນ້ຳກິນຈາກຕົວເມືອງໃກ້ຄຽງໃນລາຄາ 3,000 ກີບຕໍ່ 20 ລິດ. ຕາມຄວາມຈິງແລ້ວ, ໃນໄລຍະປະມານ 5 ປີ ກ່ອນຊາວກະສິກອນເຫຼົ່ານີ້ຍັງດຳລົງຊີວິດຢູ່ໂດຍການເຮັດໄຮ່ເປັນຫຼັກ, ການຊື້ນ້ຳກິນ ຖືເປັນການປ່ຽນແປງບໍ່ທຳມະດາໃນຊີວິດຂອງເຂົາເຈົ້າ ແລະ ແນ່ນອນວ່າເປັນການຟູມເຟືອຍເງິນຄຳຂອງເຂົາເຈົ້າ.

*ແຫຼ່ງຂໍ້ມູນ: ການສຳຫຼວດພາກສະໜາມ, ເດືອນມິຖຸນາ ປີ 2008*

ວັດຖຸສິ່ງຂອງທີ່ສະດຸດຕາຂອງຄົນອື່ນໄດ້ງ່າຍ ເຊັ່ນ: ໂທລະພາບ, ເຄື່ອງຫຼິ້ນເພງ/ວີດີໂອ, ລົດຈັກ ແລະ ອື່ນໆ ເພາະວ່າເຂົາເຈົ້າບໍ່ເຄີຍມີເງິນໃນຈຳນວນຫຼວງຫຼາຍ ແບບນີ້ໄວ້ໃນຄອບຄອງມາກ່ອນ. ເມື່ອຈ່າຍເງິນໝົດແລ້ວ, ຊາວກະສິກອນທີ່ມີດິນບໍ່ດີກໍ່ບໍ່ມີວຽກເຮັດງານທຳ ແລະ ກໍ່ບໍ່ມີຊັບສິນຫຍັງເຫຼືອ. ນອກຈາກຊີວິດການເປັນຢູ່ຂອງເຂົາເຈົ້າຈະຖືກກະທົບແລ້ວ, ອະນາຄົດລູກຫຼານຂອງເຂົາເຈົ້າກໍ່ບໍ່ມີຄວາມໝັ້ນຄົງແນ່ນອນ.

ຄົນໃນບ້ານຍົກຍ້າຍຖິ່ນຖານໃໝ່ຈຳນວນໜ້ອຍໜຶ່ງ ໄດ້ເຮັດວຽກຢູ່ໃນເຂດກໍ່ສ້າງເຂື່ອນນາກາຍ (ແຂວງຄຳມ່ວນ). ສ່ວນຫຼາຍເຂົາເຈົ້າຂາດທັກສະສີມືທີ່ຈະເຮັດວຽກຢູ່ບ່ອນນັ້ນໄດ້ (ປັດໄຈດ້ານຄວາມສາມາດເຮັດວຽກ). ເຂົາເຈົ້າຖືກຮັບເຂົ້າເຮັດວຽກທີ່ມີລາຍຮັບຕ່ຳ ເຊັ່ນ: ເປັນຄົນຍາມ, ຄົນທຳຄວາມສະອາດ ແລະ ອື່ນໆ, ແຕ່ວ່າວຽກດັ່ງກ່າວມີຈຳກັດ ແລະ ບໍ່ຕ້ອງການແຮງງານຫຼາຍ. ຊາວບ້ານຫຼາຍຄົນມີຄວາມຕ້ອງການຢາກເຮັດວຽກ ຈະແມ່ນຢູ່ໃນຖານະໃດກໍ່ໄດ້; ເຂົາເຈົ້າເວົ້າວ່າມີວຽກເຮັດດີກວ່າບໍ່ມີວຽກ. ວຽກດັ່ງກ່າວສ້າງລາຍຮັບໃຫ້ເຂົາເຈົ້າກໍ່ຄືເຮັດໃຫ້ເຂົາເຈົ້າມີຈິດໃຈອຸ່ນອ່ຽນທຸ່ນທ່ຽງ.

### ບັນຫານ້ຳ

ໂຄງການອຸດສາຫະກຳ ໃນບາງແຫ່ງ ໄດ້ເຮັດໃຫ້ແຫຼ່ງນ້ຳມີຄວາມເປື້ອນເປິ ດ້ວຍການລະບາຍສິ່ງໂສໂຄກລົງສູ່ແມ່ນ້ຳ ແລະ ຫ້ວຍໜອງຄອງບຶງຕ່າງໆ. ບໍລິສັດຂຸດຄົ້ນບໍ່ແຮ່ຢູ່ແຂວງຫຼວງນ້ຳທາແມ່ນຕົວຢ່າງໜຶ່ງທີ່ສ້າງສິ່ງ ເປື້ອນເປິດັ່ງກ່າວ. ນ້ຳເປື້ອນເປິໄດ້ເຮັດໃຫ້ສັດນ້ຳຕາຍ ແລະ ເປັນຜົນຮ້າຍຕໍ່ສຸຂະພາບຂອງປະຊາຊົນ. ເນື່ອງຈາກວ່າ ບ້ານຕ່າງໆທີ່ຕັ້ງຢູ່ໃນເຂດອ້ອມແອ້ມໃກ້ຄຽງກັບໂຮງງານບໍ່ມີແຫຼ່ງນ້ຳແຫ່ງອື່ນ ຈຶ່ງຈຳເປັນຕ້ອງອາໄສ ແຫຼ່ງນ້ຳທີ່ໄດ້ຮັບຜົນກະທົບຈາກໂຮງງານແຫຼ່ງດຽວເທົ່ານັ້ນ. ບັນຫານີ້ເປັນໄພຄຸກຄາມຕໍ່ຊີວິດຂອງຄົນໃນບ້ານຢ່າງໜັກ. ຊາວບ້ານຈຳເປັນຕ້ອງຍົກຍ້າຍບ້ານໄປຢູ່ບ່ອນອື່ນ ຫຼື ຖ້າບໍ່ຍົກຍ້າຍໜີກໍ່ຕ້ອງທົນຢູ່ໃນສະພາບທີ່ມີຄວາມສ່ຽງສູງຕໍ່ຄວາມເຈັບເປັນ ແລະ ການສູນເສຍຊີວິດ.

ມີບ້ານຫຼາຍແຫ່ງຢູ່ແຂວງຊຽງຂວາງ, ຫຼວງພະບາງ ແລະ ຄຳມ່ວນ ໄດ້ລາຍງານວ່າແມ່ນ້ຳລຳເຊ ແລະ ຫ້ວຍໜອງຄອງບຶງຕ່າງໆ ບໍ່ມີນ້ຳຫຼາຍຄືດັ່ງແຕ່ກ່ອນ ຫຼື ປະມານ 10 ປີ ກ່ອນ ຍ້ອນການປ່ຽນແປງຂອງສະພາບດິນຟ້າອາກາດ. ບັນຫານີ້ໄດ້ສົ່ງຜົນກະທົບບໍ່ດີຕໍ່ການຜະລິດກະສິກຳ ແລະ ສັດລ້ຽງຢ່າງຮ້າຍແຮງ. ວົງຈອນສະບຽງອາຫານທຳມະຊາດກໍ່ກຳລັງມີການປ່ຽນແປງໄປຍ້ອນການຕັດໄມ້ທຳລາຍປ່າ: ຜັກທຳມະຊາດບາງຊະນິດກໍ່ບໍ່ເກີດຂຶ້ນອີກແລ້ວ.

### ການສຳປະທານທີ່ດິນ

ຜ່ານມາ, ໂດຍສະເພາະຢູ່ໃນເຂດພາກໃຕ້ຂອງລາວ ໄດ້ມີການອະນຸຍາດໃຫ້ສຳປະທານທີ່ດິນຂະໜາດໃຫຍ່ເພື່ອປູກຕົ້ນຢາງກະຕັງກະຕິ້ວ ໂດຍບໍ່ສົນໃຈເລີຍວ່າ ດິນດັ່ງກ່າວ ໄດ້ນຳໃຊ້ເຮັດຫຍັງແດ່ມາກ່ອນ; ບໍ່ວ່າຈະເປັນ ພື້ນທີ່ປູກຝັງ, ທີ່ຢູ່ອາໄສ ຫຼື ທົ່ງຫຍ້າລ້ຽງສັດຂອງປະຊາຊົນກໍ່ຕາມ. ສະພາບການດັ່ງກ່າວພາໃຫ້ມີບັນຫາບາງຢ່າງເກີດຂຶ້ນດັ່ງລຸ່ມນີ້:





ຊາວກະສິກອນສາມາດຊ່ວຍຕົນເອງໃນການເພີ່ມລາຍຮັບຂອງເຂົາເຈົ້າ

ມີການຂັດແຍ່ງດ້ານຜົນປະໂຫຍດ ກ່ຽວກັບ ທີ່ດິນລະຫວ່າງຊາວບ້ານກັບບໍລິສັດປູກໄມ້ອຸດສາຫະກຳ ເກີດຂຶ້ນຢູ່ ແຂວງສາລະວັນ ຍ້ອນວ່າ ບໍລິສັດຈ່າຍເງິນຊົດເຊີຍໃຫ້ແກ່ຊາວບ້ານບໍ່ພຽງພໍ ແລະ ບໍ່ຍຸຕິທຳ. ເວົ້າສະເພາະແລ້ວ, ຄ່າຊົດເຊີຍທີ່ດິນ 500,000 ກີບຕໍ່ເຮັກຕາ ທີ່ຊາວບ້ານໄດ້ສູນເສຍໄປຈາກການສຳປະທານ ແມ່ນຖືວ່າຕ່ຳໂພດ. ຊ້ຳບໍ່ໜຳ, ມາຮອດເວລານີ້ຊາວກະສິກອນບາງຄົນກໍ່ຍັງບໍ່ທັນໄດ້ຮັບຄ່າຊົດເຊີຍຫຍັງເລີຍຕໍ່ສິ່ງທີ່ເຂົາເຈົ້າໄດ້ສູນເສຍໄປ. ບັນຫາຕໍ່ມາ, ຊາວກະສິກອນອ້າງວ່າ ບໍລິສັດສວນປູກໄມ້ອຸດສາຫະກຳຄິດໄລ່ຄ່າຊົດເຊີຍໃຫ້ແກ່ພືດໄລຍະຍາວ ແລະ ໄມ້ຢືນຕົ້ນໃນທີ່ດິນຂອງເຂົາເຈົ້າຕ່ຳກວ່າລາຄາໃນທ້ອງຕະຫຼາດ. ເຂົາເຈົ້າໄດ້ຮ້ອງຮຽນໄປຍັງອຳນາດການປົກຄອງເມືອງ, ແຕ່ກໍ່ຍັງ ບໍ່ໄດ້ຮັບການແກ້ໄຂເທື່ອ. ພ້ອມກັນນັ້ນ, ເຂົາເຈົ້າກໍ່ຍັງໄດ້ຮຽກຮ້ອງໃຫ້ອຳນາດການປົກຄອງເມືອງ ຈັດສັນທີ່ດິນກະສິກຳແຫ່ງໃໝ່ໃຫ້ເຂົາເຈົ້າ, ແຕ່ມາຮອດປະຈຸບັນ ກໍ່ຍັງບໍ່ທັນໄດ້ຮັບການແກ້ໄຂເຊັ່ນດຽວກັນ. ຖ້າເບິ່ງໃນດ້ານດີ, ເຂົາເຈົ້າເຊື່ອວ່າ ໃນໄລຍະຍາວ ເຂົາເຈົ້າຍັງຈະໄດ້ຮັບຜົນປະໂຫຍດຈາກບໍລິສັດຢູ່ ເຊັ່ນ: ບໍລິສັດສັນຍາວ່າຈະສົ່ງທີ່ດິນທີ່ໄດ້ຮັບການປູກຕົ້ນຢາງແລ້ວ 1 ເຮັກຕາ ຄືນໃຫ້ແກ່ແຕ່ລະຄົວເຮືອນທີ່ໄດ້ສູນເສຍດິນໄປແລະຈຳເປັນຕ້ອງໄດ້ເວນຄືນຍ້ອນການສຳປະທານ. ແຕ່ເຖິງຢ່າງໃດກໍ່ຕາມ, ຄຳສັນຍາດັ່ງກ່າວ ກໍ່ບໍ່ໄດ້ຂຽນໄວ້ເປັນລາຍລັກອັກສອນ ແລະ ບໍ່ມີຂໍ້ຕົກລົງກັນເປັນທາງການແຕ່ຢ່າງໃດ.

ແຕ່ກ່ອນ, ຊາວກະສິກອນຜະລິດເຂົ້າ ແລະ ພືດຕ່າງໆພຽງພໍ ແລະ ເຫຼືອໄວ້ຂາຍໃນຕະຫຼາດ. ປະຈຸບັນ, ເຂົາເຈົ້າໄດ້ຮັບອະນຸຍາດໃຫ້ປູກເຂົ້າສະເພາະໃນແຖວແຄບໆ ລະຫວ່າງ ເບ້ຍຕົ້ນຢາງທາກໍ່ປູກໃໝ່. ການປູກເຂົ້າ ແນວນີ້ແນ່ນອນວ່າບໍ່ພຽງພໍກັບການດຳລົງຊີວິດຂອງເຂົາເຈົ້າ. ການປູກເຂົ້າສະຫຼັບຕາມແຖວ ຕົ້ນຢາງກໍ່ບໍ່ແມ່ນເລື່ອງງ່າຍ ເພາະວ່າຕົ້ນເຂົ້າຍັງຖືກທຳລາຍຈາກສານພິດເຄມີທີ່ບໍລິສັດໃຊ້ ເພື່ອເລັ່ງໃຫ້ຕົ້ນຕົ້ນຢາງກະຕັ້ງກະຕື້ວໃຫຍ່ໄວ. ການປູກເຂົ້າສະຫຼັບກັບພືດແນວອື່ນແບບນີ້ບໍ່ວ່າຈະຢູ່ໃນກໍລະນີໃດກໍ່ດີຈະໃຫ້ຜົນຜະລິດຕໍ່ເຮັກຕາຕ່ຳ. ເມື່ອຕົ້ນຢາງໃຫຍ່ຂຶ້ນ, ການປູກເຂົ້າສະຫຼັບຫວ່າງຕົ້ນຢາງກໍ່ຈະບໍ່ສາມາດເປັນໄປໄດ້ອີກ ເພາະວ່າຕົ້ນ ຢາງທີ່ມີໃບດົກໜາຈະບັງແສງແດດບໍ່ໃຫ້ສ່ອງໄປເຖິງຕົ້ນເຂົ້າໄດ້. ການລ້ຽງສັດທີ່ເປັນແຫຼ່ງທາດອາຫານບຳລຸງຮ່າງກາຍສຳຄັນໃນເຂດດັ່ງກ່າວກໍ່ຫຼຸດໜ້ອຍລົງຍ້ອນວ່າ ພື້ນທີ່ທົ່ງຫຍ້າໃນເມື່ອກ່ອນຖືກປູກຕົ້ນຢາງແທນໃສ່ໝົດແລ້ວ. ຊາວກະສິກອນ ໄດ້ເລີ່ມທະຍອຍກັນ ຂາຍສັດລ້ຽງຂອງຕົນເອງອອກ. ຫຼາຍຄົນຮູ້ສຶກວ່າຄອບຄົວຂອງເຂົາເຈົ້າກຳລັງຈະມີໜີ້ສິນຫຼາຍຂຶ້ນ.

ບໍລິສັດສຳປະທານທີ່ດິນດັ່ງກ່າວນີ້ ຍັງສ້າງຄວາມເສຍຫາຍໃຫ້ແກ່ລະບົບນິເວດ. ການປູກພືດຊະນິດດຽວຍັງ ເປັນໄພອັນຕະລາຍແກ່ສະພາບແວດລ້ອມ. ປ່າດົງທຳມະຊາດ ທີ່ຄົງຢູ່ດ້ວຍຕົວມັນເອງກໍ່ຖືກປັບປ່ຽນໃຫ້ກາຍມາເປັນສວນປູກຕົ້ນຢາງທີ່ຕ້ອງໄດ້ໃຊ້ສານເຄມີ ແລະ ປັດໄຈການຜະລິດອື່ນໆມາບຳລຸງຮັກສາ. ການໃຊ້ຢາຂ້າສັດຕູພືດ ແລະ ຝຸ່ນຈຳນວນຫຼວງຫຼາຍ ເພື່ອເລັ່ງໃຫ້ຕົ້ນຢາງຈະເລີນເຕີບໂຕໄວເຮັດໃຫ້ດິນມີຄວາມເປື້ອນເປິ, ຖົງຢາງທີ່ໃຊ້ໃນການຫຸ້ມຫໍ່ເບ້ຍຕົ້ນຢາງກໍ່ຖືກຖິ້ມປະໄວ້ຢ່າງຊະຊາຍຫຼວງຫຼາຍ, ເຮັດໃຫ້ສັດລ້ຽງໃນບ້ານເຈັບເປັນ ຫຼື ລົ້ມຕາຍຍ້ອນກິນຖົງຢາງດັ່ງກ່າວ.

ບໍລິສັດໄດ້ສະໜອງວຽກເຮັດງານທຳໃຫ້ແກ່ປະຊາຊົນທ້ອງຖິ່ນຈຳນວນໜຶ່ງແຕ່ກໍ່ບໍ່ພຽງພໍ. ໃນ ປີ 2006, ແຮງງານທີ່ເຮັດວຽກກິນເງິນເດືອນໄດ້ຮັບເງິນເດືອນໆລະປະມານ 400,000-600,000 ກີບ. ສ່ວນແຮງງານຮັບຈ້າງລາຍວັນ ໄດ້ຮັບຄ່າຈ້າງ ວັນລະ 20,000-25,000 ກີບ. ໃນ ປີ 2008, ວຽກງານໃນຊ່ວງນັ້ນ ກໍ່ບໍ່ມີຫຼາຍ ແລະ ຄ່າຈ້າງແຮງງານກໍ່ຫຼຸດລົງ. ບໍລິສັດກໍ່ຍັງຢັ້ງຢືນວ່າ ບໍ່ມີວຽກຫຼາຍ

**ກ່ອງ 4.14: ປະຊາຊົນຍັງບໍ່ທັນໄດ້ຮັບເງິນຊົດເຊີຍຄ່າທີ່ດິນ**

ບໍລິສັດປູກຕົ້ນຢາງກະຕັງກະຕິ້ວ ໄດ້ເອົາດິນກະສິກຳຂອງຂ້ອຍໄປ 6 ເຮັກຕາ. ຂ້ອຍບໍ່ໄດ້ຮັບການຊົດເຊີຍຫຍັງ ແກ່ທີ່ດິນຂອງຂ້ອຍ ນອກຈາກ ເງິນສົດຈຳນວນ 500,000 ກີບ ເທົ່ານັ້ນ ທີ່ທາງບໍລິສັດຊົດເຊີຍແກ່ພືດໄລຍະຍາວ ແລະ ຕົ້ນໄມ້ທີ່ມີໃນທີ່ດິນຕອນນັ້ນຂອງຂ້ອຍ. ປະຈຸບັນຂ້ອຍໄດ້ຮັບອະນຸຍາດໃຫ້ປູກເຂົ້າ ແລະ ຖົ່ວດິນສະຫຼັບຫວ່າງຕົ້ນຢາງ. ຂ້ອຍມີບັນຫາກັບຄົນງານຂອງບໍລິສັດຢູ່ເລື້ອຍໆ ຍ້ອນການໃຊ້ຢາຂ້າສັດຕູພືດ ເພື່ອຂ້າຫຍ້າ. ຂ້ອຍມີສະມາຊິກທັງໝົດ 6 ຄົນ ໃນຄອບຄົວຮວມທັງເດັກນ້ອຍ. ຂ້ອຍບໍ່ສາມາດຫາໄດ້ພຽງພໍ ກັບຄວາມຕ້ອງການໃຊ້ຈ່າຍຂອງເຂົາເຈົ້າແລ້ວ. ຂ້ອຍມີງົວ 4 ໂຕ ແລະ ບໍ່ສາມາດລ້ຽງຕໍ່ໄປໄດ້ອີກ. ຂ້ອຍກຳລັງຄິດຈະຂາຍງົວອອກ. ຫົກເດືອນຜ່ານໄປ, ຂ້ອຍໄດ້ຢືມເງິນສົດ 600,000 ກີບ ຈາກບໍລິສັດ ເພື່ອຕິດຕັ້ງສາຍໄຟຟ້າຢູ່ເຮືອນຂອງຂ້ອຍ. ຂ້ອຍບໍ່ມີເງິນໃຊ້ໜີ້ສິນຄືນ. ດັ່ງນັ້ນ, ຂ້ອຍຈຶ່ງຈຳເປັນຕ້ອງເຮັດວຽກຮັບຈ້າງແທນໃຫ້ບໍລິສັດ.

***ນາງ ຕຸ໋ງ, ອາຍຸ 24 ປີ, ບ້ານ ວັງຄະນານ,***
***ເມືອງ ເລົ່າງາມ, ແຂວງສາລະວັນ.***

ກວ່ານີ້ໃຫ້ເຮັດ. ນອກຈາກນີ້ແລ້ວ, ຍັງມີການບຽດແຍ້ງວຽກງານກັນເຮັດລະຫວ່າງແຮງງານທ້ອງຖິ່ນ ແລະ ແຮງງານຕ່າງປະເທດ. ໃນເວລານັ້ນ, ບໍລິສັດໄດ້ຈ້າງເອົາແຮງງານຫວຽດນາມຕ່າງດ້າວເຂົ້າມາເຮັດວຽກໃຫ້ແກ່ບໍລິສັດ ຊຶ່ງບັນຫານີ້ໄດ້ເຮັດໃຫ້ການຈ້າງແຮງງານໃນທ້ອງຖິ່ນຫຼຸດລົງ.

## ການປູກຕົ້ນໄມ້ເປັນສິນຄ້າ

ການປູກຕົ້ນໄມ້ເພື່ອເປັນສິນຄ້າໃນລາວ ມີຄວາມແຕກຕ່າງກັນໃນແຕ່ລະເຂດພື້ນທີ່ ອີງຕາມສະພາບທີ່ຕັ້ງພູມສັນຖານ ແລະ ດິນຟ້າອາກາດ. ຢູ່ພາກເໜືອຂອງລາວ, ຊາວກະສິກອນໄດ້ຮັບການຊຸກຍູ້ໃຫ້ຢຸດຕິອາຊີບການຖາງປ່າເຮັດໄຮ່ ແລະ ຫັນມາປູກຕົ້ນໄມ້ເປັນສິນຄ້າໂດຍການປູກພືດ ຫຼື ຕົ້ນໄມ້ຫຼາຍຊະນິດໃນພື້ນທີ່ດຽວ. ເຂົາເຈົ້າຍັງໄດ້ຮັບການສົ່ງເສີມໃຫ້ປູກຕົ້ນຢາງກະຕັງກະຕິ້ວ ແລະ ໄມ້ສັກຕາມເຂດເຈີ້ຍພູ. ຢູ່ໃນເຂດທີ່ໄດ້ໄປສຳຫຼວດນີ້ຍັງມີບໍລິສັດສຳປະທານພື້ນທີ່ຜະລິດກະສິກຳບໍ່ຫຼາຍ. ເຖິງຢ່າງໃດກໍ່ຕາມ, ຢູ່ໃນເຂດອື່ນໆ ເຊັ່ນວ່າ ຢູ່ແຂວງຜົ້ງສາລີ ອາດຈະມີຫຼາຍບໍລິສັດກຳລັງດຳເນີນການສຳປະທານພື້ນທີ່ຜະລິດກະສິກຳຢູ່. ບັນຫາຕົ້ນຕໍໃນປະຈຸບັນກໍ່ ແມ່ນຊາວກະສິກອນ ຂາດລາຍຮັບເພາະວ່າກວ່າເຂົາເຈົ້າຈະໄດ້ເງິນຈາກສວນປູກໄມ້ຄົງຈະໃຊ້ເວລານານໄປອີກສອງສາມປີຕໍ່ໜ້າ. ຍິ່ງໄປກວ່ານັ້ນ, ຖ້າພໍ່ຄ້າຊາວຈີນຫາກບໍ່ຮັບຊື້ຢາງຕໍ່ໄປອີກ6-7ປີຂ້າງໜ້າ, ປະຊາຊົນກໍ່ບໍ່ຮູ້ວ່າຈະໄປຂາຍຢາງໃຫ້ໃຜແລະຂາຍໃນລາຄາເທົ່າໃດ. ຄຳຖາມສຳຄັນກໍ່ແມ່ນວ່າ ຊາວກະສິກອນຂະໜາດນ້ອຍ ຄວນລົງທຶນໃນການປູກພືດໃຫ້ຜົນຜະລິດໃນໄລຍະຍາວຫຼືບໍ່? ໂດຍສະເພາະເມື່ອລາຄາສິນຄ້າດັ່ງກ່າວມີການເໜັງຕີງຂຶ້ນລົງຢ່າງຫຼວງຫຼາຍ. ໃນທາງທີ່ດີ, ຊາວກະສິກອນຢູ່ບາງເຂດໃນແຂວງຫຼວງນໍ້າທາ ໄດ້ພາກັນຫັນໄປປູກອ້ອຍເພື່ອສົ່ງອອກໄປຈີນຊຶ່ງສາມາດສ້າງລາຍຮັບໃນໄລຍະສັ້ນໄດ້ພຽງແຕ່ໜຶ່ງປີເທົ່ານັ້ນ.

ໂດຍລວມແລ້ວ, ການປູກພືດເປັນສິນຄ້າຕ້ອງການເງິນລົງທຶນເພື່ອຊື້ອຸປະກອນການຜະລິດ ແລະ ຝຸ່ນ ຊຶ່ງສ່ວນໃຫຍ່ແລ້ວເປັນສິ່ງທີ່ຊາວກະສິກອນບໍ່ສາມາດຈັດຫາມາໄດ້. ນອກຈາກນີ້, ເຖິງວ່າພືດສິນຄ້າ ແລະ ສວນປູກໄມ້ໃນບາງເຂດ ຈະເລີ່ມໃຫ້ຜົນຜະລິດ ທີ່ສ້າງລາຍຮັບໃຫ້ແກ່ປະຊາຊົນກໍ່ຕາມ, ແຕ່ທາງດ້ານສະບຽງອາຫານຂອງເຂົາເຈົ້າກໍ່ຍັງບໍ່ໄດ້ຮັບການຄໍ້າປະກັນເທື່ອ, ໂດຍສະເພາະຢູ່ເຂດຫ່າງໄກສອກຫຼີກ ທີ່ການຄົມມະນາຄົມຂົນສົ່ງຍັງມີຄວາມຫຍຸ້ງຍາກ. ຊາວບ້ານຢູ່ເຂດດັ່ງກ່າວອາດມີເງິນແຕ່ວ່າບໍ່ມີເຂົ້າໃຫ້ຊື້.

## ຕະຫຼາດສິນຄ້າ

ໃນຫຼາຍເຂດ, ຊາວກະສິກອນ ທີ່ອາໄສຢູ່ຫ່າງໄກຈາກຈຸດສູນກາງຂອງເມືອງ ບໍ່ມີຂໍ້ມູນຂ່າວສານກ່ຽວກັບຕະຫຼາດ. ບາງຄົນກໍ່ບໍ່ມີວິທີທາງຈະຕິດຕໍ່ຊອກຫາຜູ້ຊື້ ຍ້ອນຂາດເຂີນພາຫານະ ຫຼື ຂາດການຕິດຕໍ່ພົວພັນກັບຕະຫຼາດ. ການທີ່ບໍ່ມີໂທລະສັບ ແລະ ສະພາບເສັ້ນທາງບໍ່ດີ ຍິ່ງເປັນບັນຫາໜັກໜ່ວງໃຫ້ແກ່ເຂົາເຈົ້າ. ຢູ່ພາກເໜືອ (ແຂວງຫຼວງນໍ້າທາ ແລະ ຫຼວງພະບາງ), ສິນຄ້າກະສິກຳສ່ວນໃຫຍ່ແມ່ນໄດ້ຂາຍຍົກໃຫ້ແກ່ພໍ່ຄ້າເຄື່ອນທີ່ໆ ໃຊ້ລົດບັນທຸກຂະໜາດນ້ອຍເລາະເກັບຊື້ຜົນຜະລິດກະສິກຳຢູ່ຕາມບ້ານ. ພືດກະສິກຳທີ່ປູກເປັນສິນຄ້າ ຢູ່ແຂວງພາກກາງ ມີປະເພດກະລໍ່າປີ ແລະ ສາລີເພື່ອຂາຍໃຫ້ຕະຫຼາດພາຍໃນ ແລະ ຕ່າງປະເທດ. ຢູ່ໃນບ້ານທີ່ສຳຫຼວດ ຢູ່ແຂວງຊຽງຂວາງ ກໍ່ຄ້າຍຄືກັນ, ພໍ່ຄ້າເປັນຜູ້ນຳເອົາຜົນຜະລິດກະສິກຳ ໄປສູ່ຕະຫຼາດ. ໃນສະພາບທີ່ມີການຮັບປະກັນທາງດ້ານຕະຫຼາດຄືແນວນີ້, ຊາວກະສິກອນຈະທຳການຜະລິດຕາມຄວາມສາມາດສູງສຸດ. ນອກຈາກນີ້, ການທີ່ມີພໍ່ຄ້າຄົນກາງເຂົ້າໄປເກັບຊື້ໃນບ້ານ ກໍ່ສາມາດຊ່ວຍແກ້ໄຂບັນຫາການຂົນສົ່ງຂອງຊາວກະສິກອນໄດ້, ແຕ່ວ່າ ຊາວກະສິກອນກໍ່ຍັງມີຂໍ້ເສຍປຽບເຊັ່ນດຽວກັນ ຍ້ອນວ່າ ພໍ່ຄ້າຈະເປັນຜູ້ກຳນົດລາຄາສິນຄ້າທີ່ພວກເຂົາຈະຊື້ຈາກຊາວກະສິກອນ. ບາງກໍລະນີມີດັ່ງນີ້:

*ກໍລະນີທີໜຶ່ງ,* ໃນເຂດຫ່າງໄກສອກຫຼີກທາງພາກເໜືອ, ພໍ່ຄ້າມີບົດບາດສຳຄັນໃນການເກັບຊື້ສະບຽງອາຫານທີ່ປູກຢູ່ໃນບ້ານຫ່າງໄກສອກຫຼີກ, ແຕ່ວ່າເຂົາເຈົ້າເກັບຊື້ໃນລາຄາຖືກ ແລະ ຂາຍເອົາກຳໄລສູງ.

*ກໍລະນີທີສອງ,* ໃນໄລຍະ 2-3 ປີຜ່ານມາ, ລາຄາເຂົ້າເປືອກຢູ່ພາກໃຕ້ (ແຂວງຈຳປາສັກ) ກິໂລໜຶ່ງ ຄິດເປັນເງິນຢູ່ລະຫວ່າງ 1,000-1,200 ກີບ. ແຕ່ມາເຖິງປະຈຸບັນນີ້ (ຕົ້ນປີ 2008), ລາຄາເຂົ້າເປືອກຖີບຕົວສູງຂຶ້ນເຖິງ 2,000 ກີບ ຕໍ່ກິໂລ, ແຕ່ພໍ່ຄ້າກໍ່ບໍ່ເຄີຍຄິດຈະແບ່ງປັນຜົນປະໂຫຍດໃຫ້ແກ່ຜູ້ຜະລິດເລີຍ. ຄວາມແຕກຕ່າງລະຫວ່າງລາຄາທີ່ພໍ່ຄ້າຈ່າຍໃຫ້ແກ່ຊາວກະສິກອນ ແລະ ລາຄາທີ່ເຂົາເຈົ້າຂາຍຢູ່ໃນຕະຫຼາດອາດຢູ່ລະຫວ່າງ 70 -100%.

*ກໍລະນີທີສາມ,* ນອກຈາກລາຄາຜົນຜະລິດກະສິກຳແລ້ວ, ຊາວບ້ານຍັງລາຍງານບັນຫາຕ່າງໆທີ່ກ່ຽວຂ້ອງກັບລະບົບການຊັ່ງນໍ້າໜັກ. ຢູ່ບ້ານໜຶ່ງໃນ ແຂວງຫຼວງນໍ້າທາ, ພໍ່ຄ້າຊາວຈີນເຮັດທຸກວິທີທາງ ເພື່ອຂໍໃຫ້ໄດ້ນຳເອົາອ້ອຍໄປຊັ່ງນໍ້າໜັກຢູ່ຈີນ. ຊາວບ້ານບໍ່ສາມາດຄວບຄຸມ ຫຼື ຕັດສິນໃຈໃດໆໄດ້ກ່ຽວກັບຜົນຜະລິດຂອງເຂົາເຈົ້າ ໃນເມື່ອຜົນຜະລິດດັ່ງກ່າວຜ່ານຊາຍແດນອອກໄປ. ຊາວກະສິກອນ ບໍ່ຮູ້ຈັກເລີຍວ່າຕົນເອງຖືກສໍ້ໂກງ ຫຼື ບໍ່ ແລະ ໜ້ອຍຫຼາຍປານໃດ, ພຽງແຕ່ວ່າເຂົາເຈົ້າບໍ່ມີຄວາມໝັ້ນໃຈກັບວິທີການອັນນີ້ປານໃດ. ຕາຊັ່ງກໍ່ແມ່ນອີກບັນຫາໜຶ່ງຢູ່ ແຂວງຈຳປາສັກ ຊຶ່ງເປັນບ່ອນທີ່ຊາວກະສິກອນຂາຍເຂົ້າ ແລະ ຜັກຂອງເຂົາເຈົ້າ. ຊາວກະສິກອນບໍ່ມີຊິງຊັ່ງ ແລະ ຕ້ອງໄດ້ອາໄສຊິງຊັ່ງຂອງພໍ່ຄ້າ. ຖ້າມີການປັບຊິງຊັ່ງ, ຊາວກະສິກອນກໍ່ບໍ່ມີທາງຮູ້ໄດ້ເລີຍ, ແຕ່ວ່າເຂົາເຈົ້າກໍ່ພຽງແຕ່ກ່າວຄວາມຮູ້ສຶກບໍ່ສະບາຍໃຈກັບຊິງຊັ່ງເທົ່ານັ້ນ.

*ກໍລະນີທີສີ່,* ຢູ່ແຂວງສາລະວັນ, ນອກຈາກຈະອະນຸຍາດໃຫ້ຊາວກະສິກອນປູກເຂົ້າ ແລະ ຖົ່ວດິນສະຫຼັບກັບ ຫວ່າງແຖວຕົ້ນຢາງກະຕັງກະຕິ້ວແລ້ວ, ບໍລິສັດສຳປະທານທີ່ດິນ ຍັງຊຸກຍູ້ໃຫ້ຊາວກະສິກອນປູກມັນຕົ້ນຢູ່ໃນດິນທີ່ປະຊາຊົນຍັງເປັນເຈົ້າຂອງຢູ່. ບໍລິສັດສຳປະທານ ເປັນຜູ້ສະໜອງແນວພັນໃຫ້ເຂົາເຈົ້າພາຍໃຕ້ຂໍ້ຜູກມັດທີ່ວ່າຕ້ອງຂາຍຜົນຜະລິດຄືນໃຫ້ແກ່ບໍລິສັດ. ໃນເບື້ອງຕົ້ນ, ບໍລິສັດສັນຍາວ່າ ຈະຊື້ມັນຕົ້ນຄືນຈາກຊາວກະສິກອນໃນລາຄາ 200 ກີບຕໍ່ກິໂລ, ແຕ່ຫຼັງຈາກຜະລິດ ແລະ ເກັບກ່ຽວແລ້ວ, ທາງບໍລິສັດຊໍ້າພັດໃຫ້ລາຄາແກ່ຜູ້ຜະລິດ ພຽງແຕ່ 190 ກີບ ຕໍ່ກິໂລ. ບໍລິສັດໃຫ້ເຫດຜົນວ່າ ມັນຕົ້ນດັ່ງກ່າວມີແປ້ງມັນໜ້ອຍກວ່າທີ່ຄວນຈະເປັນ. ທາງບໍລິສັດໄດ້ນຳເອົາມັນຕົ້ນໄປທຳການກວດສອບທາດແປ້ງໃນຫ້ອງວິໄຈຢູ່ ປະເທດຫວຽດນາມ ຊຶ່ງບໍ່ມີທາງເປັນໄປໄດ້ທີ່ຊາວກະສິກອນຈະຮູ້ຂະບວນການທົດສອບດັ່ງກ່າວ.

### ການຫັນກຳມະສິດໄປສູ່ເອກະຊົນ

ໃນລະຫວ່າງ 1-2 ປີທີ່ຜ່ານມາ, ລາຄາສິນຄ້າກະສິກຳທຸກຊະນິດໄດ້ຖີບຕົວສູງຂຶ້ນ (ລາຄາຖົ່ວດິນໄດ້ເພີ່ມຂຶ້ນຈາກ 5,000 ກີບເປັນ 8,000 ກີບຕໍ່ໜຶ່ງກິໂລ). ຊາວກະສິກອນໄດ້ຂະຫຍາຍພື້ນທີ່ປູກພືດຂອງຕົນໂດຍການຫວ່ານພືດພັນໃສ່ດິນສ່ວນຮວມ. ໃນເມື່ອພື້ນທີ່ທົ່ງຫຍ້າລ້ຽງສັດຫຼຸດລົງ, ເສດຖະກິດການລ້ຽງສັດກໍ່ໄດ້ຮັບຜົນກະທົບບໍ່ດີ. ຊາວກະສິກອນທີ່ມີທີ່ດິນໜ້ອຍ ຫຼື ບໍ່ມີທີ່ດິນຈະພົບກັບຄວາມຫຍຸ້ງຍາກທີ່ສຸດໃນການລ້ຽງດູສັດລ້ຽງຂອງເຂົາເຈົ້າ. ມີບາງຄັ້ງເຂົາເຈົ້າຕ້ອງໄດ້ເດີນທາງເຂົ້າໄປໃນເຂດພູຫຼາຍກິໂລແມັດເພື່ອຊອກຫາທົ່ງຫຍ້າລ້ຽງສັດ. ຢູ່ແຂວງຊຽງຂວາງ, ເຂດພື້ນທີ່ປ່າໄມ້ຫຼາຍແຫ່ງກໍ່ຍັງຖືກບຸກເບີກມາເປັນທີ່ທຳການຜະລິດ.

**ກ່ອງ 4.15: ໃຜເປັນຜູ້ປູກພືດ, ໃຜເປັນຜູ້ເກັບກ່ຽວຜົນ: ການຊື້ຂາຍພືດສິນຄ້າໃນຕະຫຼາດ**

ຢູ່ບ້ານໜອງໃໝ່ໃນ ແຂວງ ຊຽງຂວາງ, ບໍລິສັດເກັບຊື້ໝາກສາລີ ສ້າງຂ່າວປ່າວປິວໃນຕົ້ນປີ 2008 ວ່າລາຄາໝາກສາລີຈະຫຼຸດລົງ. ຕໍ່ກັບຂ່າວດັ່ງກ່າວ, ເຮັດໃຫ້ຊາວກະສິກອນ ພາກັນຟ້າວນຳເອົາຜົນຜະລິດຂອງຕົນໄປ ຂາຍໃນລາຄາ 1,700 ກີບຕໍ່ກິໂລ. ເຖິງຢ່າງໃດກໍ່ຕາມ, ຊາວກະສິກອນບາງຄົນກໍ່ບໍ່ເຊື່ອຂ່າວລືດັ່ງກ່າວແລະ ລໍຖ້າ ແລະ ຕໍ່ມາເຂົາເຈົ້າກໍ່ໄດ້ຂາຍໃນລາຄາ 1,800 ກີບຕໍ່ກິໂລ. ຢູ່ບ້ານທາລີ ແຂວງຫຼວງພະບາງກໍ່ມີກໍລະນີຄ້າຍຄືກັນນີ້ເກີດຂຶ້ນໂດຍທີ່ບໍລິສັດເຮັດສັນຍາເກັບຊື້ 'ໝາກເດືອຍ' ບໍ່ປະຕິບັດຕາມຄຳສັນຍາທີ່ໃຫ້ໄວ້ກັບ ຊາວບ້ານ ຄື: ແທນທີ່ບໍລິສັດຈະຊື້ໃນລາຄາ 1,000 ກີບຕໍ່ໜຶ່ງກິໂລຕາມທີ່ໄດ້ສັນຍາກັນໄວ້, ແຕ່ບໍລິສັດກໍ່ຈ່າຍພຽງແຕ່ 400 ກີບເທົ່ານັ້ນຕໍ່ໜຶ່ງກິໂລໂດຍໃຫ້ເຫດຜົນວ່າລາຄາຕະຫຼາດໃນຕົວເມືອງຕົກຕໍ່າ.

ບັນຫາໜຶ່ງອີກທີ່ກ່ຽວຂ້ອງກັບລາຄາແມ່ນໄດ້ສັງເກດເຫັນໃນບ້ານບາງແຫ່ງຢູ່ແຂວງ ຊຽງຂວາງ. ອີງຕາມການສຳພາດຊາວບ້ານ, ອຳນາດການປົກຄອງເມືອງ ຕ້ອງການໃຫ້ຊາວກະສິກອນຂາຍໝາກສາລີໃຫ້ແກ່ພໍ່ຄ້າລາວ ຜູ້ທີ່ສະເໜີໃຫ້ລາຄາປະມານ950ກີບຕໍ່ໜຶ່ງກິໂລ.ແຕ່ໃນເວລາດຽວກັນນັ້ນພໍ່ຄ້າຊາວຫວຽດນາມໄດ້ສະເໜີ ໃຫ້ລາຄາດີກວ່າປະມານ 1,200 ກີບຕໍ່ໜຶ່ງກິໂລ. ຍ້ອນແມ່ນຄຳສັ່ງຂອງອຳນາດການປົກຄອງ ເມືອງ, ຊາວກະສິກອນຈຳເປັນຕ້ອງປະຕິບັດຕາມ ແລະ ຂາຍສາລີສ່ວນໃຫຍ່ຂອງຕົນໃຫ້ແກ່ພໍ່ຄ້າລາວ ແລະ ສ່ວນໜ້ອຍ ໜຶ່ງກໍ່ໄດ້ລັກຂາຍໃຫ້ແກ່ພໍ່ຄ້າຊາວຫວຽດນາມ.

## *ສະຫຼຸບຫຍໍ້:*

*ສັງຄົມ ແລະ ເສດຖະກິດຊົນນະບົດ ກຳລັງໄດ້ຮັບການຫັນປ່ຽນຈາກເສດຖະກິດກະສິກຳໄປສູ່ລະບົບເສດຖະກິດຕະຫຼາດຢ່າງໄວວາ. ເຖິງຢ່າງໃດກໍ່ຕາມ, ນະໂຍບາຍ ແລະ ອົງການຈັດຕັ້ງຕ່າງໆທີ່ມີຢູ່ກໍ່ຍັງບໍ່ທັນມີຄວາມພ້ອມພຽງພໍ ເພື່ອຮັບປະກັນການຫັນປ່ຽນໃຫ້ເປັນໄປຢ່າງນິ້ມນວນດີ ໂດຍສະເພາະກໍ່ແມ່ນ ແຜນງານດ້ານການຍົກຍ້າຍຈັດສັນ ແລະ ການຈັດຕັ້ງກຸ່ມບ້ານໃໝ່ ຍັງມີຊ່ອງຫວ່າງຫຼາຍປະການໃນດ້ານການດຳລົງຊີວິດຂອງປະຊາຊົນ, ຕະຫຼາດກໍ່ຍັງບໍ່ທັນສົມບູນ, ສະພາບການຊຸດໂຊມລົງ ຂອງລະບົບນິເວດມີຜົນກະທົບບໍ່ດີຕໍ່ການດຳລົງຊີວິດ ແລະ ບັນຫາທີ່ກ່າວມານີ້ກໍ່ຍັງຈະມີສືບຕໍ່ໄປ.*

## ຂໍ້ສະເໜີແນະຕົ້ນຕໍ

1. ຄວນເອົາໃຈໃສ່ປັບປຸງຄຸນນະພາບ ແລະ ເພີ່ມປະລິມານວຽກເຮັດງານທຳຂອງປະຊາຊົນໃນເຂດຊົນນະບົດໃຫ້ຫຼາຍ ພ້ອມທັງມີຄວາມສະໝີພາບ ແລະ ຍືນຍົງ. ເພື່ອເຮັດໃຫ້ວຽກງານນີ້ປະກົດຜົນເປັນຈິງໄດ້ ຈຶ່ງຮຽກຮ້ອງໃຫ້ຈັດຕັ້ງປະຕິບັດວິທີການຕ່າງໆຫຼາຍດ້ານໄປພ້ອມໆກັນ.
    - ກ. ຂໍ້ສະເໜີແນະຕົ້ນຕໍ ໃນການສົ່ງເສີມການຜະລິດກະສິກຳເພື່ອເພີ່ມລາຍຮັບ ໃຫ້ແກ່ປະຊາຊົນຊາວຊົນນະບົດໄດ້ສະເໜີມາແລ້ວໃນບົດທີ 3, ດັ່ງນັ້ນຈະບໍ່ໄດ້ເວົ້າຊໍ້າອີກ. ແຕ່ຈຸດສຳຄັນໜຶ່ງ ທີ່ຢາກນຳມາເນັ້ນໜັກຕື່ມອີກກໍ່ຄືໂຄງການປູກໄມ້ຂະໜາດໃຫຍ່ຄວນໄດ້ຮັບການສົ່ງເສີມສະເພາະແຕ່ໃນເຂດທີ່ມີຜົນກະທົບດ້ານລົບຕໍ່ຊີວິດການເປັນຢູ່ຂອງປະຊາຊົນໜ້ອຍ (ຖ້າມີ).
    - ຂ. ສຳລັບກິດຈະກຳທີ່ບໍ່ແມ່ນກະສິກຳ:
    - (i). ການກຳນົດລະອຽດ ແລະ ເລືອກເຟັ້ນເອົາວຽກງານທີ່ປະຊາຊົນເຮັດນອກຈາກວຽກຜະລິດກະສິກຳແລ້ວນຳມາປະຕິບັດ ແລະ ຜັນຂະຫຍາຍແຕ່ນ້ອຍຫາໃຫຍ່ໂດຍຜ່ານຂະບວນການເຝິກອົບຮົມ, ລະບົບສິນເຊື່ອ ແລະ ການຈັດຕັ້ງປະຕິບັດລວມໝູ່ ເພື່ອດຳເນີນການຊື້ຂາຍໃນຕະຫຼາດໂດຍຜ່ານການສ້າງຕັ້ງສະມາຄົມຜູ້ຜະລິດແມ່ນວິທີການທີ່ມີປະໂຫຍດ.
    - (ii). ສຳລັບສິນຄ້າຈາກກິດຈະກຳນອກລະດູກະສິກຳ ແລະ ຂະແໜງການທີ່ບໍ່ແມ່ນກະສິກຳທີ່ນຳໄປຂາຍຢູ່ໃນຕະຫຼາດນັ້ນຄວນເອົາໃຈໃສ່ເນັ້ນໜັກດ້ານຄຸນນະພາບໃຫ້ດີ. ດັ່ງນັ້ນ, ການຮ່ວມມືລະຫວ່າງພາກເອກະຊົນ ແລະ ການຊ່ວຍເຫຼືອຂອງລັດຖະບານຈຶ່ງຖືເປັນປັດໄຈສຳຄັນທີ່ສຸດໃນວຽກງານນີ້.
    - (iii). ການຄົ້ນຄວ້າລະອຽດ ກ່ຽວກັບນະໂຍບາຍໄລຍະຍາວເພື່ອຊຸກຍູ້ສົ່ງເສີມການພັດທະນາກິດຈະກຳນອກລະດູການຜະລິດ ແລະ ຂະແໜງການທີ່ບໍ່ແມ່ນກະສິກຳ ເປັນວຽກງານຈຳເປັນທີ່ຕ້ອງປະຕິບັດ. ບົດຮຽນໃນຊຸມປີຜ່ານມາ, ໃນປະເທດອິນເດຍໄດ້ສ້າງຕັ້ງຄະນະກຳມະການລະດັບຊາດຂຶ້ນເພື່ອຄົ້ນຄວ້າຫາຍຸດທະສາດການພັດທະນາຂະແໜງການນອກລະບົບ. ການນຳໃຊ້ວິທີການຄ້າຍຄືກັນນີ້ອາດຈະເປັນປະໂຫຍດໃຫ້ແກ່ປະເທດລາວເຮົາ.

2. ສະພາບການຫວ່າງງານຕາມລະດູການ ແລະ ການຈ້າງງານບໍ່ເຕັມເວລາ ແມ່ນປະກົດການໜຶ່ງ ທີ່ເກີດຂຶ້ນໃນລາວເຮົາ.

ແຜນງານຮັບປະກັນການຈ້າງງານ, ໂດຍສະເພາະເພື່ອຄົນທຸກຍາກ ແລະ ຜູ້ທີ່ຫວ່າງງານຕາມລະດູການ ແມ່ນເຄື່ອງມືທາງດ້ານນະໂຍບາຍທີ່ມີປະສິດທິຜົນສູງ ເພື່ອຕໍ່ສູ້ກັບສະພາບການຈ້າງງານ ບໍ່ເຕັມເວລາ ແລະ ການຫວ່າງງານຕາມລະດູການທີ່ຈະນຳໄປສູ່ການລຶບລ້າງຄວາມທຸກຍາກ. ກຸ່ມຄົນທີ່ຄວນຈະໄດ້ຮັບປະໂຫຍດຈາກແຜນງານດັ່ງກ່າວ ແມ່ນແຮງງານທີ່ຂາດທີ່ດິນ ແລະ ແຮງງານໃນຄອບຄົວທີ່ບໍ່ໄດ້ຮັບຄ່າຈ້າງ (ກ່ອງ 4.9 ໄດ້ສະແດງໃຫ້ເຫັນປະສົບການຂອງປະເທດອື່ນໆ). ເນື່ອງຈາກວ່າ ອົງປະກອບສຳຄັນຂອງແຜນງານດັ່ງກ່າວ ແມ່ນການສ້າງຊັບສິນຊົນນະບົດ, ດັ່ງນັ້ນຈຶ່ງຄວນພິຈາລະນາສຶກສາຄວາມເປັນໄປໄດ້ໃນການນຳໃຊ້ແຮງງານເຫຼືອເຂົ້າໃນແຜນງານການລົງທຶນຂອງລັດ.

3. ການກຳເນີດຂຶ້ນຂອງແຮງງານຮັບຈ້າງທີ່ຂາດທັກສະສີມືເປັນສັນຍານບົ່ງບອກເບື້ອງຕົ້ນເຖິງສະພາບການຂາດເຂີນປັດໃຈຈຳເປັນພື້ນຖານ ແລະ ຄວາມບໍ່ເທົ່າທຽມໃນເສດຖະກິດຊົນນະບົດ. ເນື່ອງຈາກສາເຫດຂອງສະພາບດັ່ງກ່າວ ມີຄວາມແຕກຕ່າງກັນໄປໃນແຕ່ລະເຂດຈຶ່ງມີຄວາມຈຳເປັນຕ້ອງດຳເນີນການສຶກສາລະອຽດ ເພື່ອໃຫ້ສາມາດກຳນົດໄດ້ສາເຫດຕ່າງໆຂອງການກຳເນີດຂຶ້ນຂອງແຮງງານຮັບຈ້າງທົ່ວໄປດັ່ງກ່າວເພື່ອຊ່ວຍໃນການວາງນະໂຍບາຍເຮັດໃຫ້ທ່າອ່ຽງດັ່ງກ່າວຊ້າລົງ.

4. ສປປ ລາວ ໄດ້ບັນລຸເປົ້າໝາຍຂອງຕົນໃນການຈັດກຸ່ມບ້ານ ແລະ ການຍົກຍ້າຍຈັດສັນບ້ານປະຊາຊົນ. ແຕ່ເຖິງຢ່າງໃດກໍ່ຕາມ, ຂະບວນການຈັດຕັ້ງປະຕິບັດດັ່ງກ່າວ ກໍ່ຍັງມີຊ່ອງຫວ່າງຫຼາຍດ້ານໂດຍສະເພາະດ້ານການສ້າງທາງເລືອກໃນການດຳລົງຊີວິດ ແລະ ການແບ່ງປັນຊັບສິນສ່ວນຮວມຕ່າງໆລະຫວ່າງສະມາຊິກແຕ່ລະຄົນໃນບ້ານຈັດກຸ່ມໃໝ່. ດັ່ງນັ້ນ, ກ່ອນຈະຍົກຍ້າຍຄົວເຮືອນ, ສິ່ງສຳຄັນກໍ່ຄືອຳນາດການປົກຄອງຕ້ອງສ້າງແຜນແມ່ບົດ ແລະ ຮູບແບບການນຳໃຊ້ທີ່ດິນຢູ່ໃນເຂດພື້ນທີ່ໃໝ່ທີ່ປະຊາຊົນຈະຍົກຍ້າຍເຂົ້າໄປອາໄສຢູ່ ແລະ ດຳເນີນວຽກງານຂອງຕົນ, ລວມເຖິງການປະເມີນເນື້ອທີ່ດິນປູກຝັງເພື່ອຮັບປະກັນໃຫ້ຊຸມຊົນດັ່ງກ່າວນຳໃຊ້ຢ່າງມີປະສິດທິຜົນ.

5. ຄວນຈັດຕັ້ງປະຕິບັດ ການຕິດຕາມສະພາບຄວາມຄວາມໝັ້ນຄົງດ້ານສະບຽງອາຫານສະເພາະ ແລະ ແຕກຕ່າງກັບການຕິດຕາມຄວາມທຸກຍາກໂດຍແບ່ງຄວາມຜິດຊອບໃນການຈັດຕັ້ງປະຕິບັດ ແລະ ຄຸ້ມຄອງຢ່າງຈະແຈ້ງ ໃຫ້ແກ່ຂັ້ນທ້ອງຖິ່ນ. ວິທີໜຶ່ງທີ່ສາມາດເປັນໄປໄດ້ ກໍ່ຄືການບັນທຶກຕົວປ່ຽນສຳຄັນທີ່ຊີ້ບອກເຖິງການຄ້ຳປະກັນດ້ານສະບຽງອາຫານ ເຂົ້າໃນປຶ້ມບັນທຶກບ້ານ.

6. ຍ້ອນຄວາມບໍ່ເທົ່າທຽມກັນ ໃນການຄອບຄອງທີ່ດິນ ແລະ ການຂາດທີ່ດິນທຳມາຫາກິນ ກຳລັງເພີ່ມຂຶ້ນ ຢ່າງວ່ອງໄວ, ສະນັ້ນ, ການປ່ຽນແປງຂອງຕະຫຼາດທີ່ດິນ ຈຶ່ງຮຽກຮ້ອງໃຫ້ມີການປະເມີນ ໂດຍອາໄສການຄົ້ນຄວ້າລະອຽດ ເປັນພື້ນຖານເພື່ອສ້າງນະໂຍບາຍຫຼຸດຜ່ອນຜົນກະທົບບໍ່ດີຕໍ່ຊີວິດການເປັນຢູ່ຂອງປະຊາຊົນ ໃຫ້ມີໜ້ອຍທີ່ສຸດ.

7. ທຶນມະນຸດເຮັດໃຫ້ປະຊາຊົນມີຄວາມເຂັ້ມແຂງ ແລະ ເພີ່ມຄວາມສາມາດ ໃນການເຮັດວຽກຂອງເຂົາເຈົ້າ ໃຫ້ສູງຂຶ້ນ. ຕໍ່ໜ້າສະພາບການສະສົມທຶນມະນຸດຕ່ຳ ແລະ ຄວາມບໍ່ເທົ່າທຽມກັນທາງດ້ານທຶນມະນຸດສູງຈຶ່ງຮຽກຮ້ອງໃຫ້ເອົາໃຈໃສ່ປັບປຸງ, ຂະຫຍາຍ ແລະ ຍົກລະດັບການສຶກສາໃນເຂດຊົນນະບົດ ໃຫ້ທົ່ວເຖິງ. ພ້ອມກັນນັ້ນ, ກໍ່ຈຳເປັນຕ້ອງເອົາໃຈໃສ່ພິເສດຕໍ່ສະພາບທຶນມະນຸດຕ່ຳ ໃນບາງກຸ່ມຊົນເຜົ່າ (ສຳລັບລາຍລະອຽດໃຫ້ເບິ່ງບົດທີ 2 ແລະ 6).

ກ່ອນອື່ນໝົດຈະຕ້ອງຖືເອົາວຽກງານສະກັດກັ້ນ ແລະ ຢຸດຕິການກະທຳ ທີ່ພາໃຫ້ເກີດການປົນເປື້ອນຂອງນ້ຳ ຈາກການຂະຫຍາຍອຸດສາຫະກຳ ມາເປັນບູລິມະສິດສຳຄັນ. ຕ້ອງກຳນົດລະບຽບກົດໝາຍ ເພື່ອບັງຄັບໃຫ້ໂຮງງານອຸດສາຫະກຳທັງໝົດ ດຳເນີນການບຳບັດສິ່ງເສດເຫຼືອຕ່າງໆ ກ່ອນຈະກຳຈັດອອກຈາກໂຮງງານໄປ ແລະ ການຈັດຕັ້ງປະຕິບັດລະບຽບກົດໝາຍນີ້ ຕ້ອງມີຄວາມເຂັ້ມງວດ. ການສ້າງຄວາມເຂັ້ມແຂງ ໃນດ້ານການຕິດຕາມກວດກາສິ່ງປົນເປື້ອນຕ່າງໆ ຈາກໂຮງງານອຸດສາຫະກຳໃຫ້ແກ່ຊຸມຊົນ ແລະ ມອບໝາຍໜ້າທີ່ຮັບຜິດຊອບໃຫ້ເຂົາເຈົ້າ ສາມາດເຮັດໃຫ້ການຈັດຕັ້ງປະຕິບັດກົດໝາຍໄດ້ດີຂຶ້ນ. ພ້ອມດຽວກັນນັ້ນ, ຫ້ອງການຊັບພະຍາກອນນ້ຳ ແລະ ສິ່ງແວດລ້ອມຂອງລັດຖະບານ ສົມທົບກັບກະຊວງ ແລະ ອຳນາດການປົກຄອງແຂວງທີ່ກ່ຽວຂ້ອງ ຄວນເອົາໃຈໃສ່ຕິດຕາມກວດກາ ຢ່າງໃກ້ຊິດ ການກຳຈັດສິ່ງເສດເຫຼືອຂອງບໍລິສັດຕ່າງໆທີ່ກໍ່ໃຫ້ເກີດການປົນເປື້ອນໃນຈຳນວນຫຼວງຫຼາຍ.

## ເອກະສານຊ້ອນທ້າຍ 4.1:
# ຄຳນິຍາມ ແລະ ການເກັບກຳຂໍ້ມູນ

*ກິດຈະກຳໃນສະພາບປົກກະຕິ*ແມ່ນວຽກທີ່ບຸກຄົນໃດໜຶ່ງປະຕິບັດໃນໄລຍະເວລາໃດໜຶ່ງຍ້ອນຂ້າງດົນ, ປະມານຫົກເດືອນຫຼືຫຼາຍກວ່ານັ້ນ. ບໍ່ໄດ້ໝາຍຄວາມວ່າບຸກຄົນນັ້ນເຮັດວຽກໝົດມື້ໃນກິດຈະກຳດັ່ງກ່າວ; ແຕ່ກົງກັນຂ້າມ, ບາງເວລາບຸກຄົນນັ້ນອາດເຮັດວຽກອື່ນ ຫຼື ບໍ່ເຮັດວຽກຫຍັງເລີຍ. ນີ້ໝາຍຄວາມວ່າກິດຈະກຳທີ່ໄດ້ກຳນົດພາຍໃຕ້ສະພາບປົກກະຕິແມ່ນ 'ວຽກທີ່ເຮັດເລື້ອຍທີ່ສຸດ' ຂອງບຸກຄົນໃດໜຶ່ງ.

*ກິດຈະກຳໃນສະພາບປະຈຸບັນ* ແມ່ນກຸ່ມກິດຈະກຳທີ່ແຮງງານຜູ້ໜຶ່ງເຮັດໃນໄລຍະເວລາອາທິດໃດໜຶ່ງ ຊຶ່ງ ເປັນການວັດແທກໃນຈຳນວນມື້ເຮັດວຽກ (1/2 ມື້ເປັນຕົ້ນ); ໜຶ່ງມື້ເຮັດວຽກເທົ່າກັບໜຶ່ງມື້ເຕັມທີ່ແຮງງານຜູ້ໜຶ່ງເຮັດວຽກ. ຕົວຢ່າງວ່າ, ຖ້າບຸກຄົນຜູ້ໜຶ່ງເຮັດວຽກເປັນແຮງງານຮັບຈ້າງທົ່ວໄປເປັນເວລາ XX ມື້, ກໍ່ຈະຖືວ່າ XX ແມ່ນມື້ເຮັດວຽກຮັບຈ້າງ.

**ຕາຕະລາງ A4.1: ການຈັດແບ່ງໜ້າວຽກຕາມຂະແໜງການ, 2005-2006**

| ລຳດັບ | ສະຖານະພາບ | ຂະແໜງການ | ມື້ທີ 1 | ມື້ທີ 2 | ມື້ທີ 3 | ມື້ທີ 4 | ມື້ທີ 5 | ມື້ທີ 6 | ມື້ທີ 7 | ລວມ |
|---|---|---|---|---|---|---|---|---|---|---|
| (1) | (2) | (3) | (4) | (5) | (6) | (7) | (8) | (9) | (10) | (11) |
| 1 | | | | | | | | | | |
| 2 | | | | | | | | | | |
| 3 | | | | | | | | | | |
| 4 | | | | | | | | | | |
| | | ລວມ | 1 ມື້ | 1 ມື້ | 1 ມື້ | 1 ມື້ | 1 ມື້ | 1 ມື້ | 1 ມື້ | 1 ມື້ |

***ແຫຼ່ງຂໍ້ມູນ:*** *ແບບສອບຖາມຄົວເຮືອນ; ເບິ່ງ ລັດຖະບານອິນເດຍ (2003).*

**ຕາຕະລາງ A4.2: ລາຍລະອຽດຂອງກຸ່ມຕົວແທນ**

| ແຂວງ | ເມືອງ | ຈຳນວນບ້ານ | ປະເພດບ້ານ |
|---|---|---|---|
| 1 ຫຼວງນ້ຳທາ | ສິງ | 2 | II, II |
| | ລອງ | 2 | I, IV |
| 2 ຫຼວງພະບາງ | ນານ | 1 | VI |
| | ຊຽງເງິນ | 2 | IV, VI |
| 3 ຊຽງຂວາງ | ແປກ | 2 | I, III |
| | ຄຳ | 2 | IV, VI |
| 4 ຄຳມ່ວນ | ນາກາຍ | 2 | V, V |
| | ຫີນບູນ | 1 | III |
| 5 ສາລະວັນ | ເລົ່າງາມ | 2 | V, V |
| | ຄົງເຊໂດນ | 1 | III |
| 6 ຈຳປາສັກ | ໂພນທອງ | 2 | VI, V1 |
| | ບາຈຽງຈະເລີນສຸກ | 1 | IV |
| **ຫົກແຂວງ** | **12 ເມືອງ** | **20 ບ້ານ** | |

# ເອກະສານຊ້ອນທ້າຍ 4.1:
# ຄຳນິຍາມ ແລະ ການເກັບກຳຂໍ້ມູນ

**ຕາຕະລາງ A4.2: ລາຍລະອຽດຂອງກຸ່ມຕົວແທນ**

**ປະເພດບ້ານ**

I. ບ້ານທີ່ມີກິດຈະກຳຕ່າງໆຕິດພັນກັບຕະຫຼາດ (ສອງບ້ານ–ບ້ານໜຶ່ງຢູ່ພາກເໜືອ, ບ້ານໜຶ່ງຢູ່ພາກກາງ)
II. ບ້ານກຳລັງຫັນປ່ຽນມາປູກພືດແບບກະເສດສຸມ (ສອງບ້ານ–ຢູ່ພາກເໜືອໝົດ)
III. ບ້ານທີ່ມີການເຄື່ອນຍ້າຍແຮງງານຫຼາຍໄປເຮັດວຽກຢູ່ຕ່າງປະເທດ (ສາມບ້ານ–ສອງບ້ານຢູ່ພາກເໜືອ, ໜຶ່ງບ້ານຢູ່ພາກໃຕ້)
IV. ບ້ານທີ່ຖືກຈັດກຸ່ມໃໝ່ (ສີ່ບ້ານ – ສອງບ້ານຢູ່ພາກເໜືອ, ໜຶ່ງບ້ານຢູ່ພາກກາງ, ໜຶ່ງບ້ານຢູ່ພາກໃຕ້)
V. ບ້ານທີ່ຖືກຍົກຍ້າຍຖິ່ນຖານ (ສີ່ບ້ານ – ສອງບ້ານຢູ່ພາກກາງ, ສອງບ້ານຢູ່ພາກໃຕ້)
VI. ບ້ານອື່ນໆທີ່ບໍ່ມີລັກສະນະສະເພາະພິເສດ, ເອີ້ນວ່າ 'ບ້ານອື່ນໆ' (ຫ້າບ້ານ–ສອງບ້ານຢູ່ພາກເໜືອ, ໜຶ່ງບ້ານຢູ່ພາກກາງ, ສອງບ້ານຢູ່ພາກໃຕ້)

ຂໍ້ມູນຕົ້ນຕໍແມ່ນໄດ້ເກັບໃນໄລຍະເດືອນກັນຍາຫາເດືອນທັນວາ ປີ 2007, ຕໍ່ມາແມ່ນແຕ່ເດືອນມັງກອນຫາກຸມພາ ປີ 2008 ອີງຕາມການເລືອກຕົວປ່ຽນທີ່ວັດແທກສະພາບປະຈຸບັນ (50% ຂອງຕົວແທນ).

**ຄຸນລັກສະນະຂອງແຕ່ລະປະເພດແຮງງານ**
*ແຮງງານປະກອບອາຊີບອິດສະຫຼະ (SE)* ແມ່ນແຮງງານທີ່ເຮັດວຽກກັບວິສາຫະກິດທີ່ຕົນເອງເປັນເຈົ້າຂອງ; ອາດແມ່ນທີ່ ທຳການຜະລິດກະສິກຳ, ວິສາຫະກິດການຄ້າ ຫຼື ເປັນແຮງງານຮັບຈ້າງທີ່ຮັບຜິດຊອບວຽກງານເອງຄົນດຽວ ເຊັ່ນ: ຊ່າງແປງທໍ່ນ້ຳ, ຊ່າງຕັດເສື້ອ ແລະ ອື່ນໆ.

*ແຮງງານໃນຄອບຄົວທີ່ບໍ່ໄດ້ຮັບຄ່າຈ້າງ* (UFW) ແມ່ນແຮງງານທີ່ຢູ່ໃນວິສາຫະກິດຂອງຄອບຄົວ, ແຕ່ວ່າບໍ່ແມ່ນເຈົ້າຂອງ ຫຼື ບໍ່ ແມ່ນຜູ້ສິດຕັດສິນໃຈໃນວິສາຫະກິດດັ່ງກ່າວ. ແຮງງານຜູ້ນັ້ນອາດເຮັດວຽກເຕັມມື້ ຫຼື ບາງເວລາ, ແຕ່ວ່າບໍ່ມີສິດທາງການໃນການຄຸ້ມຄອງຂະບວນການເຮັດວຽກ. ສະຖານະພາບຂອງແຮງງານໃນຄົວເຮືອນທີ່ບໍ່ໄດ້ຮັບຄ່າຈ້າງໃນກຳລັງແຮງງານ ໂດຍທົ່ວໄປແລ້ວແມ່ນຕ່ຳກວ່າສະຖານະພາບຂອງແຮງງານທີ່ປະກອບອາຊີບອິດສະຫຼະ.

*ລູກຈ້າງປະຈຳ* (RE) ແມ່ນແຮງງານທີ່ເຮັດວຽກເປັນປົກກະຕິ ແລະ ໄດ້ຮັບຄ່າຈ້າງເປັນລາຍເດືອນ ຫຼື ລາຍອາທິດ. ໂດຍທົ່ວໄປແລ້ວ, ໃນກໍລະນີນີ້ອາດເວົ້າໄດ້ວ່າ ສະຖານະພາບທາງເສດຖະກິດຂອງເຂົາເຈົ້າແມ່ນຂ້ອນຂ້າງສູງ.

*ແຮງງານຮັບຈ້າງທົ່ວໄປ* (WE) ແມ່ນແຮງງານທີ່ເຮັດວຽກຕາມສັນຍາໄລຍະສັ້ນ ຊຶ່ງອາດສັ້ນເຖິງເຄິ່ງມື້ ແລ້ວ ຕ້ອງຊອກຫານາຍຈ້າງໃໝ່ (ຫຼື ຜູ້ເກົ່າ) ທຸກໆສອງຫາສາມມື້ ຫຼື ທຸກອາທິດ ແລະ ເຈລະຈາສັນຍາແຮງງານ (ລວມເຖິງຄ່າຈ້າງ).

ປະຊາຊົນມັກຈະເຮັດວຽກທີ່ມີໝົນດີທາງດ້ານເສດຖະກິດຢູ່ໃນບ້ານເຮືອນຂອງຕົນເອງ ຫຼື ເຮັດວຽກທີ່ໃຫ້ລາຍຮັບເພີ່ມ ໄປຄຽງຄູ່ກັບວຽກໃນເຮືອນ ເຊັ່ນ: ເຮັດກິນ, ອານາໄມ, ລ້ຽງເດັກ ແລະ ອື່ນໆ ຊຶ່ງສ່ວນໃຫຍ່ແລ້ວ ຈະແມ່ນແມ່ຍິງເປັນຜູ້ເຮັດວຽກນີ້.

**ອື່ນໆ:** ໝາຍເຖິງວຽກທີ່ຢູ່ໃນຂອບເຂດວຽກໃນບ້ານເຮືອນ, ຢູ່ນອກຕະຫຼາດແຮງງານ ລວມທັງການຫວ່າງງານ. ວຽກອື່ນໆໃນທີ່ນີ້ ແມ່ນເວົ້າສະເພາະແຕ່ວຽກໃນສະພາບປະຈຸບັນ ແລະ ບໍ່ແມ່ນວຽກໃນສະພາບປົກກະຕິ.

**ຄຸນລັກສະນະຂອງກຸ່ມຕົວແທນ**
ອາຍຸສະເລ່ຍຂອງປະຊາກອນແມ່ນ 24 ປີ: ຊາຍ 23.6 ປີ, ຍິງ 24.4 ປີ. ອາຍຸສະເລ່ຍຂອງປະຊາກອນທີ່ມີອາຍຸ 10 ປີ ຫຼື ຫຼາຍກວ່າແມ່ນ 32.8 ປີ: ຊາຍ 30.1 ປີ ແລະ ຍິງ 31.0 ປີ. ສຳລັບປະຊາກອນຊົນເຜົ່າແບ່ງຕາມໝວດພາສາມີກຸ່ມໝວດພາສາລາວ-ໄຕ 6,665 ຄົນ (ໃນ 1,322 ຄົວເຮືອນ), ກຸ່ມມອນ-ຂະແມ 2,163 ຄົນ (377 ຄົວເຮືອນ), ກຸ່ມຈີນ-ຕິເບດ 1,212 ຄົນ (234 ຄົວເຮືອນ), ແລະ ມົ້ງ-ອີວມຽນ 751 ຄົນ (110 ຄົວເຮືອນ). ຂະໜາດສະເລ່ຍຂອງຄົວເຮືອນລວມແມ່ນ 5.28 ຄົນ: ລາວ-ໄຕ 5.05 ຄົນ, ມອນ-ຂະແມ 5.74 ຄົນ, ຈີນ-ຕິເບດ 5.18 ຄົນ ແລະ ມົ້ງ-ອີວມຽນ 6.83 ຄົນ.

ອົງປະກອບຂອງລາຍຮັບ: ລາຍຮັບທີ່ໄດ້ຈາກການປູກຝັງ, ລາຍຮັບຈາກການລ້ຽງສັດ, ຫາປາ, ປຸງແຕ່ງອາ ຫານ, ຮັບຈ້າງ, ເຄື່ອງປ່າຂອງດົງ, ລາຍຮັບໄດ້ຈາກນອກບ້ານ (ອອກໄປເຮັດວຽກນອກບ້ານ) ແລະ ເງິນສົ່ງກັບບ້ານ.

## ເອກະສານຊ້ອນທ້າຍ 4.2:
# ອະທິບາຍຕົວປ່ຽນຕ່າງໆຂອງລາຍຮັບ

ເພື່ອປະເມີນໃຫ້ເຫັນຜົນສະທ້ອນ ທີ່ມີພ້ອມໆກັນຂອງຕົວປ່ຽນຕ່າງໆຫຼາຍຕົວ ຕໍ່ລາຍຮັບຕໍ່ຫົວຄົນເພິ່ນໄດ້ວັດ ແທກຄວາມສຳພັນຄ່າສະເລ່ຍຂອງຕົວປ່ຽນເຫຼົ່ານັ້ນ ກັບຄ່າຕົວປ່ຽນອື່ນທີ່ຄ້າຍຄືກັນ. ຕົວປ່ຽນຕ່າງໆດັ່ງລຸ່ມນີ້ ເປັນຕົວແທນໃຫ້ປັດໄຈເຈັດຢ່າງທີ່ມີຜົນກະທົບຕໍ່ລາຍຮັບ:

1. ອັດຕາສ່ວນຂອງລາຍຮັບຈາກແຫຼ່ງທີ່ບໍ່ແມ່ນຂະແໜງກະສິກຳ [ສຳລັບ (1)]

2. ດັດຊະນີການປູກພືດປະສົມ [ສຳລັບ (6)]

3. ດິນປູກຝັງຕໍ່ຫົວຄົນ [ສຳລັບ (4)]

4. ອັດຕາການຫວ່າງງານ (ສະພາບປະຈຸບັນ) ຕໍ່ຄົວເຮືອນ [ສຳລັບ (5)]

5. ອັດຕາການເອື່ອຍອີງດ້ານເສດຖະກິດ (ອັດຕາສ່ວນຂອງຜູ້ທີ່ບໍ່ໄດ້ເຮັດວຽກຕໍ່ຜູ້ເຮັດວຽກ) [ສຳລັບ (2)]

6. ປີການສຶກສາສະສົມຕໍ່ຫົວຄົນ (ອາຍຸແຕ່ 10 ປີຂຶ້ນໄປ) [ສຳລັບ (3)]

7. ຕົວປ່ຽນຈຳລອງສຳລັບກຸ່ມຊົນເຜົ່າ (ລາວ-ໄຕ = 1; ເຜົ່າອື່ນໆ = 0) [ສຳລັບ (7)]

ຜົນຮັບທີ່ສະເໜີໄວ້ໃນຕາຕະລາງລຸ່ມນີ້ໄດ້ສະແດງໃຫ້ເຫັນສຳປະສິດທັງໝົດທີ່ມີຄວາມໝາຍສຳຄັນທາງດ້ານສະຖິຕິ ແລະ ທັງເປັນຕົວຊີ້ບອກເຫດການທີ່ຄາດວ່າຈະມີ. ຂະໜາດ ແລະ ຄວາມສຳຄັນຂອງສຳປະສິດຕ່າງໆດັ່ງກ່າວຈະບໍ່ໄດ້ນຳມາອະທິບາຍໃນທີ່ນີ້ນອກຈາກເຫດການທີ່ຄາດວ່າຈະມີເທົ່ານັ້ນຍ້ອນວ່າສົມຜົນດັ່ງກ່າວແມ່ນໄດ້ຄິດໄລ່ຂຶ້ນມາຕົ້ນຕໍ່ກໍ່ແມ່ນເພື່ອເປັນການທົດສອບສົມມຸດຖານເທົ່ານັ້ນ.

**ຜົນຄວາມສຳພັນລະຫວ່າງຄ່າສະເລ່ຍຂອງຕົວປ່ຽນຕ່າງໆກັບຄ່າຕົວປ່ຽນອື່ນຄ້າຍຄືກັນທີ່ອະທິບາຍການປ່ຽນແປງດ້ານລາຍຮັບ**

| | ຊື່ຕົວປ່ຽນ | ສຳປະສິດ | ຄ່າ 't' (ເພື່ອສະແດງຄວາມສຳຄັນທາງດ້ານສະຖິຕິ) |
|---|---|---|---|
| 1 | ອັດຕາສ່ວນຂອງລາຍຮັບຈາກແຫຼ່ງທີ່ບໍ່ແມ່ນຂະແໜງກະສິກຳ | 0.01 | 10.2* |
| 2 | ດັດຊະນີການປູກພືດປະສົມ | 0.1 | 5.7* |
| 3 | ດິນປູກຝັງຕໍ່ຫົວຄົນ | 0.7 | 16.6* |
| 4 | ອັດຕາການຫວ່າງງານ (ສະພາບປະຈຸບັນ) ຕໍ່ຄົວເຮືອນ | -0.03 | 7.6* |
| 5 | ອັດຕາການເອື່ອຍອີງດ້ານເສດຖະກິດ | -0.4 | 4.7* |
| 6 | ປີການສຶກສາສະສົມຕໍ່ຫົວຄົນ | 0.1 | 15.3* |
| 7 | ຕົວປ່ຽນຈຳລອງສຳລັບກຸ່ມຊົນເຜົ່າ (ລາວ-ໄຕ = 1; ອື່ນໆ = 0) | 0.3 | 7.4* |
| 8 | ຄ່າຄົງທີ່ | 13.4 | - |

R2 = 0.35; F = 152.5; n = 2,039; * = ຄວາມສຳຄັນທາງດ້ານສະຖິຕິທີ່ໜ້າເຊື່ອຖືໄດ້ມີໃນລະດັບ 0.01; ຕາມການຄາດຄະເນທີ່ອີງໃສ່ຂໍ້ມູນຈາກການສຳຫຼວດແຮງງານຊົນນະບົດຂອງ NHDR 2007-2008, ກົມສະຖິຕິ

# ບົດທີ 5:

## ການສົ່ງເສີມວຽກເຮັດງານທຳທີ່ມີຄຸນຄ່າໃຫ້ແກ່ແຮງງານທີ່ມີລາຍຮັບຕ່ຳ ໃນຕົວເມືອງ ແລະ ແຮງງານເຄື່ອນຍ້າຍໄປເຮັດຢູ່ວຽກຢູ່ຕ່າງປະເທດ



## ບົດທີ 5:

# ການສົ່ງເສີມວຽກເຮັດງານທຳທີ່ມີຄຸນຄ່າໃຫ້ແກ່ແຮງງານທີ່ມີລາຍຮັບຕໍ່າ ໃນຕົວເມືອງ ແລະ ແຮງງານເຄື່ອນຍ້າຍໄປເຮັດຢູ່ວຽກຢູ່ຕ່າງປະເທດ

ສະພາບການຂອງໂລກໃນປະຈຸບັນ...ກຳລັງຢູ່ໃນໄລຍະການຫັນປ່ຽນໄປຢ່າງສັບສົນ...ແຕ່ສະພາບການດັ່ງກ່າວນີ້ກໍ່ຄືກາລະໂອກາດສຳຄັນທີ່ຄົນເຮົາຈະຕ້ອງປັບປ່ຽນຕົນເອງໃຫ້ທັນກັບຍຸກສະໄໝ. ການຮັບປະກັນວຽກເຮັດງານທຳທີ່ດີໃຫ້ແກ່ແມ່ຍິງ ແລະ ຜູ້ຊາຍ ມັນແມ່ນຄວາມຈຳເປັນທີ່ສຸດສຳລັບປະຊາຊົນ, ຄອບຄົວ ແລະ ຊຸມຊົນໃນທຸກສັງຄົມ...ວຽກງານດີ ແມ່ນຄວາມຕ້ອງການຂອງໂລກໃນປະຈຸບັນ.

Juan Somavia, ຫົວໜ້າກົມ, ອົງການ ILO

## ສະພາບລວມ

ເນື້ອໃນທີ່ໄດ້ນຳມາສະເໜີໃນບົດນີ້ແມ່ນອີງໃສ່ຜົນຂອງການສຳຫຼວດຜູ້ອອກແຮງງານຈຳນວນ 796 ຄົນໃນສີ່ຕົວເມືອງ ແລະ ການສຳພາດທາງດ້ານຄຸນນະພາບຂອງແຮງງານໃນ 6 ບ້ານທີ່ມີການເຄື່ອນຍ້າຍຜູ້ອອກແຮງງານໃນອັດຕາສ່ວນສູງອອກໄປເຮັດວຽກຢູ່ຕ່າງປະເທດ.

ແຮງງານໃນຕົວເມືອງທີ່ເຮັດວຽກຢູ່ໃນ 'ຂະແໜງວຽກທີ່ມີລາຍຮັບຕໍ່າ' (ຊຶ່ງກວມເອົາສ່ວນໃຫຍ່ຂອງອັດຕາສ່ວນແຮງງານໃນທີ່ບໍ່ແມ່ນຂະແໜງກະສິກຳທັງໝົດທີ່ມີໃນລາວ 22%) ແລະ ແຮງງານລາວທີ່ອອກໄປເຮັດວຽກຢູ່ຕ່າງ ປະເທດ (ປະມານ 8% ຂອງກຳລັງແຮງງານ) ແມ່ນອົງປະກອບສຳຄັນຂອງກຳລັງແຮງງານໂດຍລວມ. ລາຍຮັບຂອງແຮງງານ ທີ່ໄປເຮັດວຽກຢູ່ຕ່າງປະເທດພຽງຢ່າງດຽວ ກໍ່ກວມເອົາປະມານ 7% ຂອງ ລວມຍອດຜະລິດຕະພັນພາຍໃນແລ້ວ. ເຖິງຢ່າງໃດກໍ່ຕາມ, ແຮງງານສ່ວນໃຫຍ່ໃນສອງກຸ່ມນີ້ແມ່ນໄດ້ຮັບການປົກປ້ອງທາງດ້ານກົດໝາຍໜ້ອຍທີ່ສຸດ. ໂດຍປົກກະຕິແລ້ວ, ເພື່ອໃຫ້ໄດ້ລາຍຮັບລວມພຽງເລັກໜ້ອຍ (ປະມານ 20,000 ກີບຕໍ່ມື້ ໃນມື້ທີ່ເຂົາເຈົ້າເຮັດວຽກ - ມີໜ້ອຍຄົນທີ່ໄດ້ຮັບຄ່າແຮງງານໃນມື້ພັກ), ແຮງງານເຫຼົ່ານີ້ຕ້ອງເຮັດວຽກ 55 ຫາ 70 ຊົ່ວໂມງຕໍ່ອາທິດໂດຍບໍ່ໄດ້ພັກຜ່ອນ. ຫຼາຍຄົນກໍ່ຖືກຂູດຮີດແຮງງານ, ບາງຄົນກໍ່ຖືກຫຼອກລວງໄປຂາຍ ແລະ ບາງຄົນກໍ່ຖືກສໍ້ໂກງສັນຍາ (ໂດຍສະເພາະແຮງງານທີ່ໄປເຮັດວຽກຢູ່ຕ່າງປະເທດ). ແຮງງານເຫຼົ່ານີ້ ລ້ວນແຕ່ປະສົບກັບໄລຍະການຫວ່າງງານກໍ່ຄືໄລຍະທີ່ມີບັນຫາດ້ານການດຳລົງຊີວິດ ຍ້ອນວ່າເຂົາເຈົ້າອີງໃສ່ແຫຼ່ງລາຍຮັບແຫຼ່ງດຽວເທົ່ານັ້ນເປັນຕົ້ນຕໍເພື່ອລ້ຽງຊີບ-ກໍ່ຄືວຽກໃນປະຈຸບັນ.

ການດຳເນີນງານຂອງຕະຫຼາດແຮງງານຢູ່ໃນສອງຂະແໜງການດັ່ງກ່າວແມ່ນບໍ່ເປັນທາງການ, ບໍ່ວ່າຈະແມ່ນເລື່ອງການເຂົ້າສູ່ຕະຫຼາດວຽກງານ, ການເຄື່ອນຍ້າຍ ຫຼື ການໂອນເງິນກັບຄືນບ້ານ ຊຶ່ງສ່ວນໃຫຍ່ກໍ່ແມ່ນອາ ໄສຄວາມເປັນພີ່ເປັນນ້ອງ, ເພື່ອນມິດ ແລະ ຄວາມສຳພັນຕ່າງໆເປັນຫຼັກ. ການສະໜອງການບໍລິການໃຫ້ແກ່ແຮງງານເຫຼົ່ານັ້ນສ່ວນໃຫຍ່ກໍ່ແມ່ນມາຈາກການຈັດຕັ້ງບໍ່ເປັນທາງການ, ແຕ່ວ່າມັນກໍ່ເຕັມໄປດ້ວຍສິ່ງທີ່ຄາດບໍ່ເຖິງ ແລະ ອັນຕະລາຍຕ່າງໆ. ການຈັດຕັ້ງປະຕິບັດກົດໝາຍແຮງງານວ່າດ້ວຍການປົກປ້ອງຄຸ້ມຄອງແຮງງານໃນຂົງເຂດໂຮງງານອຸດສາຫະກຳບາງແຫ່ງໃນເຂດຕົວເມືອງເຫັນວ່າປະຕິບັດໄດ້ດີຫຼາຍ ເຊັ່ນ: ໂຮງງານອຸດສາຫະກຳຕັດຫຍິບ ເຖິງແມ່ນວ່າກົດໝາຍດັ່ງກ່າວຍັງບໍ່ທັນເຂົ້າໄປປົກປ້ອງແຮງງານທັງໝົດໄດ້ທົ່ວເຖິງກໍ່ຕາມ. ແຮງງານທີ່ໄປເຮັດວຽກຢູ່ໄທກໍ່ພຽງແຕ່ຄິດເອົາເອງວ່າຈະໄດ້ຮັບການປົກປ້ອງທາງດ້ານກົດໝາຍຈາກໄທ. ແຮງງານ ໃນສອງກຸ່ມທີ່ກ່າວມານີ້ແມ່ນມາຈາກຄອບຄົວທຸກຍາກ ແລະ ມີທັກສະສີມືແຮງງານຕໍ່າ. ດັ່ງນັ້ນ, ແຮງງານ ເຫຼົ່ານີ້ຈຶ່ງບໍ່ຂະຫຍາຍໂຕຫຼາຍໃນຕະຫຼາດແຮງງານ. ການປ່ຽນແປງບາງຢ່າງທີ່ມີ: ແຮງງານຮັບຈ້າງໃນຕົວເມືອງໄດ້ຍົກຖານະມາເປັນແຮງງານປະກອບອາຊີບອິດສະຫຼະ ແລະ ແຮງງານທີ່ໄປເຮັດວຽກຢູ່ຕ່າງປະເທດກໍ່ໄດ້ຮັບທັກສະສີມືເພີ່ມຂຶ້ນເພື່ອມານຳໃຊ້ໃນເວລາກັບຄືນບ້ານ. ເຖິງຢ່າງໃດກໍ່ຕາມ, ການປ່ຽນແປງຄືດັ່ງກ່າວ ໂດຍລວມກໍ່ຍັງມີໜ້ອຍຢູ່.

ຂໍ້ກຳນົດ ແລະ ກົດລະບຽບຂອງລາວກ່ຽວກັບແຮງງານທີ່ຈະອອກໄປເຮັດວຽກຢູ່ຕ່າງປະເທດມີຄວາມເຂັ້ມງວດ ຫຼາຍກວ່າຂອງປະເທດໄທ. ແຮງງານລາວຢູ່ໄທຫຼາຍກວ່າເຄິ່ງໜຶ່ງ 'ໄດ້ຮັບການຂຶ້ນທະບຽນຢູ່ໄທ', ແຕ່ວ່າແຮງ ງານດັ່ງກ່າວໄດ້ຮັບການຂຶ້ນທະບຽນຢູ່ລາວໜ້ອຍກວ່າ 5%. ນອກຈາກນັ້ນ, ອົງການຈັດຕັ້ງຢູ່ລາວທີ່ເຮັດ ໜ້າທີ່ເຕົ້າໂຮມຄືນບັນດາແຮງງານເຄື່ອນຍ້າຍກໍ່ຍັງມີໜ້ອຍ ແລະ ການຊ່ວຍເຫຼືອຂອງອົງການຈັດຕັ້ງດັ່ງກ່າວ ຕໍ່ຜູ້ທີ່ໄດ້ຮັບເຄາະຮ້າຍຈາກການຄ້າມະນຸດກໍ່ຍັງມີຈຳກັດຫຼາຍ. ສະຫຼຸບແລ້ວ, ທະນາຄານທີ່ເປັນທາງການທີ່ແຮງງານຈະສາມາດໂອນເງິນຂອງຕົນກັບຄືນມາລາວ ຍັງມີໜ້ອຍ.

ຜົນການວິເຄາະໃນບົດນີ້ ຊີ້ໃຫ້ເຫັນເຖິງຄວາມຈຳເປັນທີ່ຈະຕ້ອງໄດ້ສ້າງລະບົບຂໍ້ມູນຂ່າວສານດ້ານຕະຫຼາດແຮງງານ. ນອກຈາກນີ້, ຍັງມີສິ່ງທ້າທາຍສຳຄັນອີກຫຼາຍຢ່າງໃນການປັບປຸງຍົກລະດັບທັກສະສີມືຂອງແຮງງານ ແລະ ປັບປຸງອົງການຈັດຕັ້ງທີ່ມີໜ້າທີ່ໃນການຄຸ້ມຄອງແຮງງານ, ການເດີນທາງຂອງແຮງງານໄປເຮັດວຽກ ຢູ່ຕ່າງປະເທດ ແລະ ການໂອນເງິນກໍ່ຕ້ອງໄດ້ຈັດຕັ້ງໃຫ້ເປັນທາງການຫຼາຍຂຶ້ນ. ພ້ອມກັນນີ້ກໍ່ຍັງເປັນການ ສ້າງເງື່ອນໄຂອັນດີໃຫ້ແກ່ການເຕົ້າໂຮມບັນດາຜູ້ທີ່ກັບມາຈາກການໄປເຮັດວຽກຢູ່ຕ່າງປະເທດເພື່ອນຳໃຊ້ທັກສະ ແລະ ການໂອນເງິນກັບບ້ານຂອງແຮງງານເຫຼົ່ານັ້ນໃຫ້ເກີດປະໂຫຍດແກ່ລາວນຳອີກດ້ວຍ.

## ຈຸດປະສົງ

ການປົດປ່ອຍແຮງງານອອກຈາກຂະແໜງກະສິກຳ ແລະ ການຜະລິດແບບຄອບຄົວໄປສູ່ຂະແໜງການອື່ນ ທີ່ເຮັດໃຫ້ຊີວິດການເປັນຢູ່ດີກວ່າເກົ່ານັ້ນຍັງບໍ່ທັນແມ່ນເຫດຜົນພຽງພໍຄົບຖ້ວນ. ໃນດ້ານຫຼັກການແລ້ວ, ການປົດປ່ອຍແຮງງານອອກໄປຈາກຂະແໜງກະສິກຳທີ່ມີສະມັດຖະພາບຕ່ຳນັ້ນອາດຈະເປັນການດີ, ແຕ່ວ່າ ສ່ວນໃຫຍ່ແລ້ວ ການເຮັດວຽກຢູ່ຂະແໜງການອື່ນກໍ່ອາດຫຍຸ້ງຍາກລຳບາກເຊັ່ນດຽວກັນ. ໃນບົດທີ 3 ພວກເຮົາ ເຫັນວ່າ ການປ່ຽນແປງອາຊີບໄປສູ່ກິດຈະກຳທີ່ບໍ່ແມ່ນກະສິກຳບໍ່ແມ່ນຈະເຮັດໃຫ້ລະດັບການພັດທະນາມະນຸດເພີ່ມຂຶ້ນສະເໝີໄປ. ສະພາບຄວາມທຸກຍາກໃນເມືອງທີ່ກຳລັງເພີ່ມຂຶ້ນໃນຫຼາຍປີຜ່ານມານັ້ນຊີ້ໃຫ້ເຫັນວ່າມີການເຄື່ອນຍ້າຍຂອງຄົນທຸກຍາກຢູ່ເຂດຊົນນະບົດເຂົ້າສູ່ຕົວເມືອງ, ແຕ່ພວກເຂົາເຈົ້າເຫຼົ່ານັ້ນກໍ່ຍັງທຸກຢູ່ຄືເກົ່າ. ສ່ວນແຮງງານລາວທີ່ໄປເຮັດວຽກຢູ່ຕ່າງປະເທດພັດໄດ້ປະກອບສ່ວນສຳຄັນເຂົ້າໃນການສ້າງສາພັດທະນາ ເສດຖະກິດຂອງທັງສອງປະເທດ ແຕ່ແຮງງານເຫຼົ່ານັ້ນກໍ່ຍັງບໍ່ໄດ້ຖືກປະຕິບັດນະໂຍບາຍເທົ່າທຽມກັນໃນດ້ານວຽກງານ ແລະ ຊີວິດການເປັນຢູ່. ພວກເຮົາມັກຈະໄດ້ຍິນຂ່າວຢູ່ເລື້ອຍໆວ່າ ມີຫຼາຍກໍລະນີທີ່ມີແຮງງານຖືກຫຼອກລວງໄປຂາຍ, ມີການບັງຄັບໃຊ້ແຮງງານ ແລະ ຮ້າຍແຮງໄປກວ່ານັ້ນກໍ່ແມ່ນການໃຊ້ແຮງງານເດັກ[70] ແບບບໍ່ເຄີຍມີມາກ່ອນ.

ແຮງງານນອກຂະແໜງກະສິກຳໃນຕົວເມືອງຍັງມີແນວຄິດແບ່ງແຍກຊຶ່ງໃນນັ້ນຍັງມີກຸ່ມຄົນຈຳນວນໜຶ່ງທີ່ສະແດງຕົນເປັນຜູ້ມີສິດຫຼືມີອຳນາດຫຼາຍກວ່າຄົນອື່ນ ແລະ ກຸ່ມຄົນອັນປະກອບມີຜູ້ປະກອບອາຊີບອິດສະຫຼະແລະຜູ້ທີ່ເຮັດວຽກເປັນແຮງງານຮັບຈ້າງທົ່ວໄປໃນຂະແໜງການຜະລິດຂະໜາດນ້ອຍ. ກຸ່ມຫຼັງສຸດນີ້ເອີ້ນງ່າຍໆກໍ່ແມ່ນແຮງງານໃນ 'ຂະແໜງການນອກລະບົບໃນຕົວເມືອງ', ຊຶ່ງແຮງງານໃນຂະແໜງ ການນີ້ມີສິດທິພິເສດຕ່ຳ ແລະ ບໍ່ຖືກປົກປ້ອງຈາກລະບຽບກົດໝາຍເທົ່າທີ່ຄວນ. ເຖິງຢ່າງໃດກໍ່ຕາມ, ແຮງງານຫຼາຍຄົນໃນຂະແໜງການທີ່ເອີ້ນວ່າເປັນທາງການ (ເຊັ່ນ: ໂຮງແຮມຂະໜາດໃຫຍ່, ບໍລິສັດກໍ່ສ້າງ ຫຼື ຮ້ານຄ້າຍ່ອຍຕ່າງໆ) ກໍ່ບໍ່ຄ່ອຍໄດ້ຖືກປົກປ້ອງຈາກກົດໝາຍເຊັ່ນດຽວກັນ. ກຸ່ມຫຼັງນີ້ອາດເອີ້ນວ່າກຸ່ມ 'ແຮງງານທີ່ເຮັດວຽກໃນຂະແໜງວຽກຂັ້ນຕ່ຳ' ຊຶ່ງແມ່ນຜູ້ທີ່ມີທັກສະສີມືຂ້ອນຂ້າງຕ່ຳ, ບໍ່ໄດ້ຮັບການປົກປ້ອງຢ່າງພຽງພໍຈາກກົດໝາຍ, ບໍ່ໄດ້ເຂົ້າຮ່ວມໃນການຈັດຕັ້ງ, ມີວຽກທີ່ບໍ່ແນ່ນອນ ຊຶ່ງສ່ວນໃຫຍ່ແລ້ວແມ່ນແຮງງານປະກອບອາຊີບອິດສະຫຼະ ຫຼື ແຮງງານເຮັດວຽກໃຫ້ແກ່ຄອບຄົວທີ່ບໍ່ໄດ້ຮັບຄ່າຈ້າງໃນຂະແໜງການຜະລິດ ຫຼື ການຄ້າລະດັບຈຸລະພາກ ແລະ ສຸດທ້າຍ, ແຮງງານພວກນີ້ກໍ່ມີລາຍຮັບຕ່ຳ ແລະ ບໍ່ແນ່ນອນ[71]. ໃນທຳນອງດຽວກັນ, ແຮງງານລາວທີ່ໄປເຮັດວຽກຢູ່ປະເທດໄທ ກໍ່ປະກອບເປັນແຮງງານ ທີ່ເຮັດວຽກໃຫ້ແກ່ຕົນເອງ ຫຼື ແຮງງານອິດສະຫຼະ ແລະ ແຮງງານຮັບຈ້າງທົ່ວໄປ (ເຖິງວ່າແຮງງານທີ່ປະກອບອາຊີບອິດສະຫຼະຈະມີຈຳນວນໜ້ອຍຫຼາຍ), ຜູ້ທີ່ໄປເຮັດວຽກໄລຍະສັ້ນ ແລະ ໄລຍະຍາວ, ແຮງງານທີ່ມີທັກສະສີມື ແລະ ບໍ່ມີທັກສະມີສີມື ແລະ ອື່ນໆ. ແຮງງານເຫຼົ່ານີ້ ເກືອບທັງໝົດອາດເອີ້ນວ່າ ແຮງງານທີ່ເຮັດວຽກໃນຂະແໜງວຽກທີ່ມີລາຍຮັບຕ່ຳ ຍ້ອນວ່າ ສ່ວນໃຫຍ່ແມ່ນຜູ້ທີ່ໄປເຮັດວຽກແບບບໍ່ເປັນທາງການ (ຫຼື ແມ່ນແຮງງານຜິດກົດໝາຍ) ຊຶ່ງບໍ່ຖືກຮັບຮູ້ ແລະ ປົກປ້ອງຈາກກົດໝາຍ. ເຖິງຢ່າງໃດກໍ່ຕາມ, ແຮງງານທີ່ເຮັດວຽກຢູ່ໃນວຽກທີ່ມີລາຍຮັບຕ່ຳນີ້ ກໍ່ຍັງມີຈຳນວນໜຶ່ງທີ່ໄປເຮັດ ວຽກຖືກຕ້ອງຕາມກົດໝາຍ. ໂດຍທົ່ວໄປແລ້ວ, ຄົນທີ່ຢູ່ໃນຂະແໜງນີ້ເຖິງຈະເຮັດຢູ່ບ່ອນໃດກໍ່ຕາມເຂົາເຈົ້າ ກໍ່ຍັງແມ່ນເປັນກຸ່ມທີ່ບໍ່ມີຄວາມເຂັ້ມແຂງ ແລະ ມີອິດສະຫຼະໜ້ອຍ[72].

**ພາກນີ້ຈະລົງເລິກບາງບັນຫາຄື:**

1. ການຈ້າງງານ, ເງື່ອນໄຂການເຮັດວຽກ, ຄວາມປອດໄພ ແລະ ລາຍຮັບຂອງແຮງງານໃນວຽກ ລາຍຮັບຕ່ຳຢູ່ເຂດຕົວເມືອງ ທີ່ມີສິ່ງກະຕຸ້ນໃຫ້ປັບປຸງລາຍຮັບ ແລະ ຄວາມສາມາດເຮັດວຽກຂອງເຂົາເຈົ້າ, ແລະ

2. ຈຳນວນແຮງງານລາວທີ່ໄປເຮັດວຽກຢູ່ປະເທດໄທ ແລະ ການເຮັດວຽກຂອງເຂົາເຈົ້າ, ແລະ ຂໍ້ສະເໜີກ່ຽວກັບວິທີການເພື່ອເຮັດໃຫ້ການເຄື່ອນຍ້າຍແຮງງານໄປເຮັດວຽກສະດວກ, ປອດໄພ, ໂປ່ງໃສ ແລະ ສາມາດເປັນໄປໄດ້ຫຼາຍຂຶ້ນພ້ອມທັງເຮັດໃຫ້ການໂອນເງິນກັບບ້ານຂອງແຮງງານສະດວກຂຶ້ນ.

ແມ່ນຫຍັງທີ່ເປັນອຸປະສັກແກ່ແຮງງາທີ່ນພົບພໍ້ຢູ່ບ່ອນເຮັດວຽກ ແລະ ບ່ອນອື່ນໆ ແລະ ມີຫຍັງແດ່ທີ່ຈະສາມາດປະຕິບັດໄດ້ພາຍໃນກອບນະໂຍບາຍຂອງລັດເພື່ອຍົກສູງຄຸນນະພາບຂອງວຽກ ແລະ ຊີວິດການເປັນຢູ່ຂອງເຂົາເຈົ້າໃຫ້ດີຂຶ້ນ? ບົດນີ້ຈະຄົ້ນຄວ້າລົງເລິກກ່ຽວກັບ:

### ວິທີການ

1. ເພື່ອປະເມີນສະຖານະພາບຂອງແຮງງານໃນຕົວເມືອງ, ໂຄງການໄດ້ສຳຫຼວດແຮງງານ 796 ຄົນ (ປະມານເຄິ່ງໜຶ່ງແມ່ນແຮງງານທີ່ເຮັດວຽກໃຫ້ແກ່ຕົນເອງ ແລະ ອີກເຄິ່ງໜຶ່ງແມ່ນແຮງງານຮັບຈ້າງ) ຢູ່ໃນຂະແໜງການທີ່ເອີ້ນກັນວ່າ 'ຂະແໜງວຽກທີ່ມີລາຍຮັບຕ່ຳ' ທີ່ນະຄອນຫຼວງວຽງຈັນ, ເມືອງຫຼວງພະບາງ, ເມືອງໄກສອນພົມວິຫານ (ແຂວງສະຫວັນນະເຂດ) ແລະ ປາກເຊ (ແຂວງຈຳປາສັກ) ໃນລະຫວ່າງເດືອນ ມີນາ ຫາ ພຶດສະພາ ປີ 2008.

2. ເພື່ອປະເມີນສະຖານະພາບຂອງແຮງງານເຄື່ອນຍ້າຍໄປເຮັດວຽກຢູ່ຕ່າງປະເທດ, ໃນລະຫວ່າງເດືອນ ມີນາ ຫາ ພຶດສະພາ ປີ 2008 ແລ້ວນີ້ ໂຄງການໄດ້ດຳເນີນການຄົ້ນຄວ້າດ້ວຍວິທີການທົບທວນຄືນບັນດາເອກະສານ ແລະ ຂໍ້ມູນຕ່າງໆໃນປະ

70 ເບິ່ງ Mekong Migration Network/Asian Migration Centre (2005) ສຳລັບຄຳອະທິບາຍບັນດາເອກະສານອ້າງອີງ ຕ່າງໆຂອງຂົງເຂດອາຊີຕາເວັນອອກສຽງໃຕ້; DAN (2002) ສຳລັບລາວ.

71 ຄຳວ່າ 'ຂະແໜງວຽກຂັ້ນຕ່ຳ' ແມ່ນໄດ້ຖືກນຳໃຊ້ຄັ້ງທຳອິດໃນຫຼາຍບົດຄົ້ນຄວ້າພາຍໃຕ້ແຜນງານການຈ້າງງານຂອງອົງການແຮງງານສາກົນ (ILO). ຄຳເວົ້າດັ່ງກ່າວເປັນຄຳທີ່ຖືກຍອມຮັບຫຼາຍກວ່າ ເນື່ອງຈາກຄຳວ່າ 'ຂະແໜງການທີ່ບໍ່ເປັນທາງການ' ໄດ້ສົມມຸດເອົາຫຼາຍຄຳທີ່ມີຫຼາຍຄວາມໝາຍ. ເບິ່ງ Weeks (1975); Papola (1986). ສຳລັບການທົບທວນວັນນະກຳໃນລະດັບໂລກ, ໃຫ້ເບິ່ງ Breman (1980) (ໃນຍຸກກ່ອນໆ) ແລະ Gerxhani (2005) (ຂ້ອນຂ້າງຍັງໃໝ່ຢູ່). Bangasser (2000) ໄດ້ສະເໜີຄວາມພະຍາຍາມຂອງອົງການແຮງງານສາກົນ (ILO) ທີ່ຈະຍົກລະດັບສະພາບການເຮັດວຽກຂອງຂະແໜງການທີ່ບໍ່ເປັນທາງການ.

72 ຄຳວ່າ 'ອິດສະຫຼະ' ໝາຍເຖິງອິດສະຫຼະພາບ/ສິດເສລີພາບທີ່ປະຊາຊົນໄດ້ຮັບໃນການເລືອກເຮັດວຽກ ແລະ ແບບແຜນການດຳລົງຊີວິດຂອງເຂົາເຈົ້າ. ການຕົກຢູ່ໃນຂະແໜງວຽກຂັ້ນຕ່ຳ ເຮັດໃຫ້ອິດສະຫຼະພາບ/ສິດເສລີພາບດັ່ງກ່າວຫຼຸດລົງ.

**ຮູບສະແດງ 5.1: ອັດຕາສ່ວນແຮງງານແຈກຢາຍຕາມຊ່ອງທາງທີ່ເຂົາເຈົ້າເຂົ້າສູ່ຕະຫຼາດແຮງງານໃນແຕ່ລະ ປະເພດແຮງງານ**




***ແຫຼ່ງຂໍ້ມູນ:** ກະຊວງ ແຮງງານ ແລະ ສະຫວັດດີການສັງຄົມ (2008)*

ຈຸບັນປະກອບກັບການໂອ້ລົມສົນທະນາກັບກຸ່ມເປົ້າໝາຍສອງສາມກຸ່ມໃນຫົກບ້ານທີ່ມີແຮງງານເຄື່ອນຍ້າຍໄປເຮັດວຽກຢູ່ຕ່າງປະເທດ.

ລາຍລະອຽດຂອງຄຳນິຍາມ, ຕົວຢ່າງ ແລະ ອື່ນໆ ສາມາດເບິ່ງໄດ້ໃນເອກະສານຊ້ອນທ້າຍ 5.1[73].

## ແຮງງານໃນຕົວເມືອງທີ່ຢູ່ໃນ ‘ຂະແໜງວຽກທີ່ມີລາຍຮັບຕ່ຳ’

### ໂອກາດການເຂົ້າເຖິງວຽກເຮັດງານທຳ, ການປຸ່ງແລະ ການສືບຕໍ່ວຽກງານ

#### ການເຂົ້າເຖິງວຽກງານເຮັດງານທຳ

ໃນ ສປປ ລາວ ຍັງບໍ່ທັນມີມີລະບົບຂໍ້ມູນຂ່າວສານດ້ານວຽກເຮັດງານທຳເປັນທາງການທີ່ໃຫ້ຂໍ້ມູນກ່ຽວກັບຕະຫຼາດແຮງງານໃນຂະແໜງການນີ້. ດັ່ງນັ້ນ, ແຮງງານເປົ້າໝາຍຈຶ່ງເລືອກຊ່ອງທາງຊອກວຽກເຮັດງານທຳແບບບໍ່ເປັນທາງການ ເຊັ່ນ: ຈາກໝູ່ເພື່ອນ, ພີ່ນ້ອງ ຫຼື ພໍ່ແມ່ (ຮູບສະແດງ 5.1).

ຊ່ອງທາງໃນການຊອກວຽກເຮັດງານທຳ ທີ່ໃຊ້ກັນຫຼາຍທີ່ສຸດແມ່ນຜ່ານ‘ໝູ່ເພື່ອນແລະພີ່ນ້ອງ’,ຊຶ່ງມີຄວາມແຕກຕ່າງດ້ານບົດບາດຍິງ-ຊາຍ ໜ້ອຍ ຫຼື ບໍ່ສຳຄັນວ່າຈະເປັນແຮງງານທີ່ໄປເຮັດວຽກຕ່າງປະເທດ ຫຼື ບໍ່. ຊ່ອງທາງການໄປເຮັດວຽກທີ່ສຳຄັນອັນດັບຕໍ່ມາແມ່ນມາຈາກ ‘ການຊ່ວຍເຫຼືອຂອງພໍ່ແມ່’. ແຮງງານຮັບຈ້າງຈຳ ນວນຫຼວງຫຼາຍ ໃນກຸ່ມຕົວແທນໃຊ້ຊ່ອງທາງໃນການຊອກວຽກເຮັດງານທຳ ໂດຍຜ່ານ ‘ໝູ່ເພື່ອນ ແລະ ຍາດຕິພີ່ນ້ອງ’ ຫຼາຍກວ່າແຮງງານທີ່ປະກອບອາຊີບອິດສະຫຼະ.ບັນຫານີ້ຊີ້ໃຫ້ເຫັນວ່າການຂໍຮ້ອງໃຫ້ໝູ່ເພື່ອນຊ່ວຍຊອກຫາວຽກເຮັດງານທຳໃຫ້ງ່າຍກວ່າຈະໃຫ້ເຂົາເຈົ້າຊ່ວຍຕັ້ງຮ້ານຄ້າໃຫ້. ແຮງງານແມ່ຍິງທີ່ເປັນແຮງງານເຄື່ອນຍ້າຍໄປເຮັດວຽກຢູ່ຕ່າງປະເທດ ມີຈຳນວນໜ້ອຍກວ່າ ແຮງງານຜູ້ຊາຍ. ສ່ວນໃຫຍ່ເຂົາເຈົ້າໄດ້ຮັບການສືບທອດທຸລະກິດຈາກພໍ່ແມ່ຈຶ່ງກາຍເປັນແຮງງານທີ່ປະກອບອາຊີບອິດສະຫຼະ ແລະ ຖ້າເປັນແນວນັ້ນ, ການຊອກວຽກເຮັດງານທຳໂດຍການໃຊ້ ‘ຄວາມພະຍາຍາມຂອງຕົນເອງ’ ມີຄວາມສຳຄັນແນວໃດຖ້າວ່າຊ່ອງທາງນີ້ຫາກເປັນຊ່ອງທາງຄ້າຍຄືກັນກັບຊ່ອງທາງດ້ານການຈັດຕັ້ງທີ່ເປັນທາງການ? ສັດສ່ວນຂອງແຮງງານທີ່ເຂົ້າສູ່ຕະຫຼາດແຮງງານໄດ້ດ້ວຍຕົນເອງແມ່ນມີປະມານໜຶ່ງສ່ວນສີ່ ຫຼື ມີໜ້ອຍກວ່ານັ້ນ (ໃນແຕ່ລະເພດ). ສະຫຼຸບແລ້ວ, ຄຳວ່າຊ່ອງທາງ ‘ອື່ນໆ’: ຜູ້ຕອບສ່ວນໃຫຍ່ທີ່ຕອບວ່າເຂົາເຈົ້າໄດ້ວຽກຜ່ານຊ່ອງທາງນີ້ເວົ້າວ່າເຂົາເຈົ້າໄດ້ວຽກເຮັດທຳອີງຈາກອີງການຈັດຕັ້ງທີ່ເປັນຂອງຄົນສະໜິດກັນ

73 ກຸ່ມຕົວແທນມີແຮງງານເພດຊາຍ 306 ຄົນ (38.4%) ແລະ ແຮງງານເພດຍິງ 490 ຄົນ(61.6%), ເຫັນໄດ້ວ່າຢູ່ໃນຂະແໜງການຍ່ອຍຂອງຕະຫຼາດແຮງງານດັ່ງກ່າວມີສັດສ່ວນແຮງງານເພດຍິງຫຼາຍກວ່າ. ສ່ວນແຮງງານທີ່ຂຶ້ນກັບກຸ່ມຊົນເຜົ່າທີ່ບໍ່ເວົ້າ ພາສາລາວ-ໄຕມີພຽງແຕ່ປະມານ 5% ເທົ່ານັ້ນ. ດັ່ງນັ້ນ, ແຮງງານສ່ວນໃຫຍ່ໃນຕົວເມືອງໃນກຸ່ມຕົວແທນນີ້ແມ່ນເຜົ່າທີ່ເວົ້າພາສາລາວ-ໄຕ. ແຮງງານໂດຍທົ່ວໄປແມ່ນໄວໜຸ່ມທີ່ມີອາຍຸສະເລ່ຍປະມານ 28 ປີ: ອາຍຸສະເລ່ຍຂອງແຮງງານຜູ້ຊາຍແມ່ນ 28.8 ປີ ແລະ ແຮງງານ ແມ່ຍິງແມ່ນ 27.5 ປີ. ປີການສຶກສາສະເລ່ຍລວມທັງການສຶກສາລະດັບເຕັກນິກແມ່ນ 7.7 ປີ: ແຮງງານເພດຊາຍ 8.3 ປີ ແລະ ແຮງງານເພດຍິງ 8.2 ປີ. ແຮງງານທີ່ມີການສຶກສາລະດັບເຕັກນິກມີປະມານ 19%, ໃນນັ້ນແຮງງານເພດຊາຍ 29% ແລະ ແຮງງານ ແມ່ຍິງ 13%. ຄວາມແຕກຕ່າງດ້ານການສຶກສາ ລະຫວ່າງ ແຮງງານເຄື່ອນຍ້າຍໄປເຮັດວຽກຢູ່ຕ່າງປະເທດ ແລະ ແຮງງານພາຍໃນ ບໍ່ເຄື່ອນຍ້າຍແມ່ນມີໜ້ອຍ. ແຮງງານເພດຍິງ ແລະ ຊາຍ ທີ່ບໍ່ເຄີຍໄດ້ຮັບການສຶກສາຢ່າງເປັນທາງການເລີຍມີປະມານ 4%. ໃນກຸ່ມຕົວແທນມີແຮງງານເຄື່ອນຍ້າຍໄປເຮັດວຽກຢູ່ຕ່າງປະເທດ 22.6% :ໃນນັ້ນ, ມີແຮງງານເພດຊາຍ 26.5% ແລະ ແຮງງານເພດຍິງ 20.2% . ໃນຈຳນວນແຮງງານເຄື່ອນຍ້າຍໄປເຮັດວຽກຢູ່ຕ່າງປະເທດທັງໝົດມີແຮງງານຮັບຈ້າງທົ່ວໄປ 85% ແລະ ໃນຈຳນວນແຮງງານທີ່ບໍ່ໄດ້ໄປເຮັດວຽກຕ່າງປະເທດມີແຮງງານຮັບຈ້າງທົ່ວໄປ 42%

**ກ່ອງ 5.1: ລະບົບຂໍ້ມູນຂ່າວສານດ້ານຕະຫຼາດແຮງງານ**

ລະບົບຂໍ້ມູນຂ່າວສານດ້ານຕະຫຼາດແຮງງານ *ໃນຄວາມໝາຍກວ້າງ* ແມ່ນຖານຂໍ້ມູນຄົບຊຸດກ່ຽວກັບດ້ານຕ່າງໆຂອງແຮງງານໃນລະບົບເສດຖະກິດໃດໜຶ່ງ: ຈຳນວນຂອງປະຊາກອນ ແລະ ແຮງງານ, ອາຍຸ, ເພດ, ຄຸນ ນະວຸດທິ, ທີ່ຢູ່ແຍກຕາມເຂດ (ບ່ອນຢູ່), ລາຍລະອຽດກ່ຽວກັບການເຄື່ອນຍ້າຍແຮງງານໄປເຮັດວຽກຕ່າງປະເທດ ແລະ ອື່ນໆ. ລະບົບຂໍ້ມູນຂ່າວສານດ້ານຕະຫຼາດແຮງງານ ຍັງລວມເອົາຂໍ້ມູນຂ່າວສານກ່ຽວກັບໂອກາດໃນການຝຶກອົບຮົມດ້ານວິຊາຊີບ ແລະ ເຕັກນິກ ແລະ ວຽກເຮັດງານທຳ. ຖານຂໍ້ມູນດັ່ງກ່າວມີລັກສະນະຕໍ່ເນື່ອງຕາມເວລາ, ໝາຍຄວາມວ່າ ມີການປັບປຸງຂໍ້ມູນໃຫ້ສອດຄ່ອງກັບສະພາບແຕ່ລະໄລຍະເວລາ. ໃນລະດັບມະຫາພາກ, ຂໍ້ມູນດັ່ງກ່າວ ເປັນປັດໄຈສຳຄັນໃນການວາງແຜນພັດທະນາຄວາມສາມາດໃຫ້ແກ່ມະນຸດ, ແລະ ໃນລະດັບພາກປະຕິບັດກໍ່ເປັນກົນໄກຊ່ວຍຕອບສະໜອງຄວາມຕ້ອງການແຮງງານ. ລະບົບຂໍ້ມູນຂ່າວສານດ້ານຕະຫຼາດແຮງງານ (LMIS) ສະໜອງຂໍ້ມູນໃຫ້ແກ່ແຮງງານ ແລະ ນາຍຈ້າງກ່ຽວກັບວຽກ ແລະ ແຮງງານທີ່ມີຢູ່. ນອກຈາກນັ້ນ, ກໍ່ຍັງເປັນແຫຼ່ງໃຫ້ບໍລິການດ້ານການປຶກສານຳອີກດ້ວຍ. ໃນຄວາມໝາຍແຄບ ໂດຍສະເພາະເພື່ອຮັບໃຊ້ຂະແໜງວຽກທີ່ມີລາຍຮັບຕ່ຳ ຂອງຕະຫຼາດແຮງງານຂອງ ສປປ ລາວ ນັ້ນ, ລະບົບຂໍ້ມູນຂ່າວສານດ້ານຕະຫຼາດແຮງງານ (LMIS) ກໍ່ຍັງສາມາດອອກແບບໃຫ້ເປັນແຫຼ່ງສະໜອງຂໍ້ມູນ ກ່ຽວ ກັບ ຕຳແໜ່ງງານທີ່ຫວ່າງ, ແຮງງານທີ່ມີ, ການຝຶກອົບຮົມ ແລະ ດ້ານອື່ນໆຂອງການເຮັດວຽກໃຫ້ແກ່ຕົນເອງໃຫ້ແກ່ຜູ້ຊົມໃຊ້ແຮງງານຕ່າງໆ (ເຊັ່ນ: ແຮງງານທີ່ເປັນທ່າແຮງ, ຄູຝຶກ, ນາຍຈ້າງ, ລັດຖະບານ, ແລະ ອື່ນໆ). ໃນ ສປປ ລາວ, ຖ້າເປັນລະບົບຂໍ້ມູນຂ່າວສານຮັບໃຊ້ສະເພາະຕົວເມືອງໃດໜຶ່ງ (ເປັນຂອງສະເພາະທ້ອງຖິ່ນ), ລະບົບຂໍ້ມູນຂ່າວສານນັ້ນຈະສາມາດໃຫ້ຂໍ້ມູນແກ່ຜູ້ຊົມໃຊ້ໄດ້ດີກວ່າ. ລາຍລະອຽດມີດັ່ງລຸ່ມນີ້:

1. ສູນລະບົບຂໍ້ມູນຂ່າວສານດ້ານຕະຫຼາດແຮງງານ ທີ່ຖືເອົາຂໍ້ມູນຕົວເມືອງເປັນພື້ນຖານຄວນສະໜອງຂໍ້ມູນ ກ່ຽວກັບ ໂອກາດການຝຶກອົບຮົມຕ່າງໆໃຫ້ແກ່ແຮງງານທີ່ມີລະດັບການສຶກສາ, ມີຄວາມກະຕືລືລົ້ນ ແລະ ມີຄວາມສາມາດຈ່າຍໃນລະດັບ ແລະ ເງື່ອນໄຂແຕກຕ່າງກັນ.
2. ສູນລະບົບຂໍ້ມູນຂ່າວສານດ້ານຕະຫຼາດແຮງງານຄວນຮັກສາ ແລະ ປັບປຸງຖານຂໍ້ມູນວຽກງານທີ່ມີໃນຂະແໜງການຜະລິດ ແລະ ຂະແໜງບໍລິການຕ່າງໆ ໃຫ້ສອດຄ່ອງກັບສະພາບໃນແຕ່ລະໄລຍະເວລາເພື່ອສະໜອງຂໍ້ມູນໃຫ້ແກ່ຜູ້ທີ່ຊອກຫາວຽກເຮັດງານທຳ.
3. ສູນລະບົບຂໍ້ມູນຂ່າວສານດ້ານຕະຫຼາດ ແຮງງານຄວນສະໜອງຂໍ້ມູນ ກ່ຽວກັບ ແຮງງານປະເພດຕ່າງໆ (ອາຍຸ, ເພດ, ທັກສະ, ປະສົບການ ແລະ ອື່ນໆ.) ທີ່ມີໃນແຕ່ລະໄລຍະເວລາໃຫ້ແກ່ຜູ້ຈ້າງງານ ແລະ ຜູ້ຊອກຫາວຽກເຮັດງານທຳ .
4. ສູນລະບົບຂໍ້ມູນຂ່າວສານດ້ານຕະຫຼາດແຮງງານຄວນມີຂໍ້ມູນ ກ່ຽວກັບ ກົດໝາຍແຮງງານ, ສິດທິຂອງແຮງງານ, ຄ່າຈ້າງແຮງງານຂັ້ນຕ່ຳ ແລະ ອື່ນໆ.
5. ໃນລະດັບຄວາມຕ້ອງການສູງກວ່ານັ້ນ, ລະບົບຂໍ້ມູນຂ່າວສານດ້ານຕະຫຼາດແຮງງານ ກໍ່ຄວນສາມາດສະໜອງຂໍ້ມູນພື້ນຖານຂອງຕະຫຼາດແຮງງານໃຫ້ແກ່ແຮງງານເຄື່ອນຍ້າຍໄປເຮັດວຽກຢູ່ຕ່າງປະເທດ.

ລະບົບຂໍ້ມູນຂ່າວສານດ້ານຕະຫຼາດແຮງງານທີ່ມີປະສິດທິພາບ ສາມາດດຳເນີນການໄດ້ດີ ທີ່ສຸດ ໂດຍກະຊວງແຮງງານ ແລະ ສະຫວັດດີການສັງຄົມ ແລະ ກະຊວງແຜນການ ແລະ ການລົງທຶນໂດຍການຮ່ວມມືກັບສະຫະພັນກຳມະບານລາວ ແລະ ສະຫະພັນແມ່ຍິງລາວ ແລະ ມີການຮ່ວມມືກັບບັນດາຜູ້ຈ້າງງານໃນລັດຖະບານ, ອົງການຈັດຕັ້ງທີ່ບໍ່ສັງກັດລັດ ແລະ ພາກເອກະຊົນ. ການມີສ່ວນຮ່ວມຂອງພາກເອກະຊົນຫຼາຍຂຶ້ນ ຈະຊ່ວຍເພີ່ມບົດບາດຂອງເຂົາເຈົ້າ ແລະ ເຮັດໃຫ້ການເຄື່ອນໄຫວຂອງລະບົບໄດ້ດີ ແລະ ມີປະສິດທິພາບຫຼາຍຂຶ້ນ. ໃນຫຼາຍປະເທດ, ເພິ່ນສາມາດເຂົ້າເຖິງຂໍ້ມູນຂ່າວສານດ້ານຕະຫຼາດແຮງງານໄດ້ຈາກວາລະສານ, ສິ່ງພິມ ແລະ ສື່ທາງເອເລັກໂຕຣນິກ. ສ່ວນລາວເຮົາກໍ່ສາມາດດຳເນີນການສຶກສາວິໄຈເພື່ອຊອກຫາວິທີການເຜີຍແຜ່ຂໍ້ມູນຂ່າວສານທີ່ດີທີ່ສຸດ (ຫຼື ປະຕິບັດຫຼາຍວິທີປະສົມປະສານກັນໄປ).

**ຕາຕະລາງ 5.1: ການແຈກຢາຍອັດຕາສ່ວນຂອງແຮງງານ ແລະ ພໍ່ແມ່ຂອງແຮງງານຕາມອາຊີບຂອງເຂົາເຈົ້າ**

| ອາຊີບ | ອັດຕາສ່ວນການກະຈາຍຂອງ ພໍ່ແມ່ຕາມອາ ຊີບຂອງເຂົາເຈົ້າ | ອັດຕາສ່ວນການກະຈາຍແຮງງານ ຕາມວຽກປະຈຸບັນຂອງເຂົາເຈົ້າ |
|---|---|---|
| ລັດຖະບານ/ການບໍລິການອື່ນໆ | 13.1 | 0.6 |
| ການຄ້າຂາຍແລະການຕະຫຼາດແຮງງານ | 17.1 | 37.1 |
| ແຮງງານໃນຂະແໜງກະສິກຳ ແລະ ຂະ ແໜງວຽກອື່ນໆທີ່ກ່ຽວຂ້ອງ | 59.3 | 0.0 |
| ແຮງງານທີ່ເຮັດວຽກກັບເຄື່ອງຈັກນອກຂະແໜງກະສິກຳ | 5.5 | 43.8 |
| ຊ່າງກໍ່, ຊ່າງຕັດຫຍິບ, ຊ່າງຕັດເກີບ, ຊ່າງຕັດຜົມ, ຊ່າງໄມ້ | 5.0 | 18.3 |
| ແຮງງານບໍ່ມີທັກສະສີມື | 0.0 | 0.3 |

***ໝາຍເຫດ:*** *ໃນກໍລະນີທີ່ພໍ່ແມ່ບໍ່ມີຊີວິດຢູ່ນັ້ນ, ກໍ່ຈະໄດ້ຮັບການລາຍງານອາຊີບຫຼ້າສຸດຂອງເຂົາໃຫ້ຮັບຮູ້*
***ແຫຼ່ງຂໍ້ມູນ:*** *ກະຊວງແຮງງານ ແລະ ສະຫວັດດີການສັງຄົມ (2008).*

ຫຼື ບ່ອນທີ່ເຄີຍເປັນລູກຄ້າປະຈຳມາແລ້ວ, ຫຼື ບາງຄັ້ງເຂົາເຈົ້າກໍ່ເຮັດວຽກປ່ຽນແທນຜູ້ທີ່ລາພັກວຽກຊົ່ວຄາວ ແລ້ວກໍ່ສືບຕໍ່ເຮັດວຽກນັ້ນໄປເລີຍ. ດັ່ງນັ້ນ, ຊ່ອງທາງນີ້ກໍ່ບໍ່ແຕກຕ່າງຈາກຊ່ອງທາງທີ່ຜ່ານມາ ຄື 'ໝູ່ເພື່ອນ ແລະ ຍາດພີ່ນ້ອງ'. ຖ້າມີລະບົບຂໍ້ມູນຂ່າວສານດ້ານຕະຫຼາດແຮງງານສຳລັບກຸ່ມແຮງງານເຫຼົ່ານີ້ຈະເປັນການຊ່ວຍໄດ້ຫຼາຍທີ່ສຸດ (ກ່ອງ 5.1).

## ການປ່ຽນວຽກງານ

ວຽກງານທີ່ຜູ້ອອກແຮງງານເຮັດຢູ່ໃນປະຈຸບັນ ແຕກຕ່າງຈາກວຽກງານຂອງພໍ່ແມ່ຂອງເຂົາເຈົ້າບໍ່ (ການປ່ຽນວຽກງານລະຫວ່າງຮຸ່ນຄົນ)? ຫຼັງຈາກການເຂົ້າສູ່ຕະຫຼາດແຮງງານຄັ້ງທຳອິດເຂົາເຈົ້າໄດ້ພັດທະນາຕົນເອງໃຫ້ມີຄວາມກ້າວໜ້າ ຫຼື ບໍ່? ໃນໄລຍະເວລາເຮັດວຽກງານທີ່ເຂົາເຈົ້າໄດ້ເລືອກເອົາຢູ່ໃນຕະຫຼາດແຮງງານນັ້ນເຂົາເຈົ້າມີຄວາມກ້າວໜ້າຂຶ້ນ ຫຼືບໍ່?

### ການປ່ຽນວຽກງານລະຫວ່າງຮຸ່ນຄົນ

ຂໍ້ມູນກ່ຽວກັບການປ່ຽນວຽກງານລະຫວ່າງຮຸ່ນຄົນ ໝາຍເຖິງຄວາມແຕກຕ່າງລະຫວ່າງອາຊີບຂອງແຮງງານແລະອາຊີບຂອງພໍ່ແມ່ເຂົາເຈົ້າໄດ້ສະແດງໃຫ້ເຫັນວ່າປະມານ 59% ຂອງຈຳນວນແຮງງານທັງໝົດໃນກຸ່ມຕົວແທນທີ່ກຳເນີດມາຈາກຄອບຄົວຊາວກະສິກອນບໍ່ໄດ້ເຮັດວຽກໃນຂະແໜງກະສິກຳເລີຍ (ຕາຕະລາງ 5.1)[74]. ໃນທາງກົງກັນຂ້າມ, ໃນຂະນະທີ່ແຮງງານຮຸ່ນຄົນປະຈຸບັນເຮັດວຽກ (ນອກຂະແໜງກະສິກຳ) ກັບເຄື່ອງກົນຈັກ ມີຫຼາຍກວ່າ 40% ຂອງແຮງງານທັງໝົດ, ແຕ່ສ່ວນພໍ່ແມ່ຂອງເຂົາເຈົ້າທີ່ເຮັດວຽກ (ຫຼືເຄີຍເຮັດວຽກ) ກັບເຄື່ອງກົນຈັກພັດມີພຽງແຕ່ 5.5% ເທົ່ານັ້ນ. ໃນຄວາມເປັນຈິງແລ້ວ, ຈະເຫັນໄດ້ວ່າ ການປະກອບອາຊີບການງານລະຫວ່າງຮຸ່ນຄົນຕ່າງໆມີການປ່ຽນແປງໄປຕາມຍຸກສະໄໝ. ປະມານ 13% ຂອງພໍ່ແມ່ຂອງແຮງງານຮຸ່ນຄົນ ປະຈຸບັນເຮັດວຽກ (ຫຼືເຄີຍເຮັດວຽກ) ກັບລັດຖະບານ ຫຼື ການບໍລິການດ້ານອື່ນໆ, ແຕ່ວ່າສັດສ່ວນດັ່ງກ່າວ ໃນແຮງງານຮຸ່ນຄົນປະຈຸບັນ ໄດ້ຫຼຸດລົງເຫຼືອແຕ່ 0.6%. ສັດສ່ວນແຮງງານເຮັດວຽກກັບ ລັດຖະບານ ຫຼື ການບໍລິການອື່ນໆ ອາດຈະບໍ່ເພີ່ມຂຶ້ນເພາະວ່າ ການເຮັດວຽກກັບລັດຖະບານ ຫຼື ການບໍລິການທີ່ຄ້າຍຄືກັນອື່ນໆ ແມ່ນຖືວ່າ 'ມີກຽດ' ຄືກັນ. ສະຫຼຸບແລ້ວ, ກິດຈະກຳຄ້າຂາຍ ແລະ ກິດຈະກຳການຕະຫຼາດ ໄດ້ເພີ້ມຂຶ້ນຫຼາຍ ຈາກປະມານ 17% (ພໍ່ແມ່ຂອງແຮງງານຮຸ່ນປະຈຸບັນ) ມາເປັນ 37.1% (ແຮງງານເຮັດວຽກກັບເຄື່ອງກົນຈັກ). ແຮງງານເຮັດວຽກໃນຂະແໜງກົນຈັກນີ້ກຳລັງຂະຫຍາຍໂຕຫຼາຍທີ່ສຸດ, ແຕ່ວ່າກໍ່ບໍ່ແມ່ນໝົດທຸກວຽກທີ່ຢູ່ໃນຂະແໜງການດັ່ງກ່າວຈະມີການປ່ຽນແປງຫຼາຍ. ສະຫຼຸບຄວາມແລ້ວ, ການປ່ຽນແປງຢ່າງດຽວທີ່ເຫັນໄດ້ກໍ່ຄື ການປົດປ່ອຍແຮງງານອອກຈາກຂະແໜງກະສິກຳໄປເຮັດວຽກໃນຂະແໜງການອື່ນ.

### ການປ່ຽນຈາກວຽກງານທຳອິດມາຫາວຽກງານປະຈຸບັນ

ຜູ້ທີ່ເຄີຍມີປະສົບປະການປ່ຽນວຽກງານມາກ່ອນມີຈຳນວນບໍ່ຫຼາຍ. ໂດຍລວມແລ້ວ, ແຮງງານທີ່ເຄີຍປ່ຽນວຽກ ງານຄັ້ງດຽວມີພຽງແຕ່ 17% ເທົ່ານັ້ນ (ໃນນັ້ນມີຊາຍ: 22% ; ຍິງ: 14% ) ແລະ ແຮງງານທີ່ປ່ຽນວຽກງານເຖິງ 2 ເທື່ອ[75] ມີໜ້ອຍກວ່າ 2%. ໃນຈຳນວນແຮງງານທີ່ປ່ຽນວຽກງານເຮັດນັ້ນ, ສາມາດເຫັນໄດ້ ຢ່າງຈະແຈ້ງຢູ່ໃນການປ່ຽນແປງຈາກການເຮັດວຽກງານຮັບຈ້າງ ມາເປັນການປະກອບອາຊີບອິດສະຫຼະ (ຕາຕະລາງ 5.2), ຊຶ່ງໃນຄວາມຮູ້ສຶກຂອງຜູ້ອອກແຮງງານເອງແລ້ວ ແມ່ນຖືວ່າມີຄວາມພໍໃຈ. ໃນປະຈຸບັນນີ້, ແຮງງານທັງໝົດໄດ້ພາກັນຫັນປ່ຽນມາເຮັດວຽກທີ່ບໍ່ແມ່ນກະສິກຳ, ຊຶ່ງໃນນັ້ນລວມມີແຮງງານທີ່ເຄີຍເຮັດວຽກກະສິກຳເປັນວຽກງານທຳອິດຂອງເຂົາເຈົ້າມີ 11.9%. ແຮງງານເຫຼົ່ານີ້ໄດ້ຍ້າຍໄປສູ່ຂະແໜງອຸດສາຫະກຳ ແລະ ຂະແໜງບໍລິການຫຼາຍຂຶ້ນ (ຕາຕະລາງ 5.2). ຕົວເລກສະຖິຕິດັ່ງກ່າວ ແມ່ນກົງກັບຜົນການສຶກສາຢູ່ໃນບົດທີ 3 ທີ່ວ່າ ຂະແໜງບໍລິການ ເປັນຂະແໜງດຶງດູດເອົາແຮງງານຈຳນວນຫຼາຍກວ່າ ຂະແໜງອຸດສາຫະກຳປຸງແຕ່ງ. ໃນຂະນະດຽວກັນກໍ່ຍັງເຫັນວ່າ ອັດຕາສ່ວນຂອງແຮງງານເຮັດວຽກກັບເຄື່ອງກົນຈັກ ທີ່ບໍ່ຮັບໃຊ້ການກະສິກຳ ກໍ່ມີຈຳນວນເພີ່ມຂຶ້ນເຊັ່ນດຽວກັນ. ສະຫຼຸບແລ້ວເຫັນວ່າ ການປ່ຽນວຽກງານທີ່ເຫັນໄດ້ຢ່າງຈະແຈ້ງ ກໍ່ມີແຕ່ ການຍົກຍ້າຍຂອງແຮງງານອອກຈາກຂະແໜງກະສິກຳໄປສູ່ວຽກງານອື່ນໆເທົ່ານັ້ນ.

**ຕາຕະລາງ 5.2: ອັດຕາສ່ວນຂອງແຮງງານແຈກຢາຍຕາມສະຖານະພາບວຽກງານ, ອຸດສາຫະກຳ ແລະ ອາຊີບໃນປະຈຸບັນ ແລະ ເມື່ອກ່ອນ**

| ສະຖານະພາບ | ວຽກງານໃນເມື່ອກ່ອນ | ວຽກງານໃນປະຈຸບັນ |
|---|---|---|
| ປະອບອາຊີບອິດສະຫຼະ | 31.1 | 59.3 |
| ແຮງງານຮັບຈ້າງ | 68.9 | 40.7 |
| ລວມ | 100 | 100 |
| **ຂະແໜງການ** | **ວຽກໃນເມື່ອກ່ອນ** | **ວຽກປະຈຸບັນ** |
| ກະສິກຳ ແລະ ວຽກທີ່ໃກ້ຄຽງ | 11.9 | 0.0 |
| ອຸດສາຫະກຳ | 51.1 | 55.6 |
| ບໍລິການ | 37.0 | 44.4 |
| ລວມ | 100 | 100 |
| **ອາຊີບ** | **ວຽກໃນເມື່ອກ່ອນ** | **ວຽກປະຈຸບັນ** |
| ລັດຖະບານ/ການບໍລິການອື່ນໆ | 1.5 | 0.7 |
| ຄ້າຂາຍ/ການຕະຫຼາດ | 20.7 | 27.4 |
| ຄ້າຂາຍ/ການຕະຫຼາດ | 10.4 | 0.0 |
| ແຮງງານທີ່ເຮັດວຽກກັບເຄື່ອງຈັກທີ່ບໍ່ຮັບໃຊ້ກະສິກຳ | 36.3 | 42.2 |
| ຊ່າງກໍ່ສ້າງ, ຊ່າງຕັດຫຍິບ, ຊ່າງຫຍິບເກີບ, ຊ່າງຕັດຜົມ, ຊ່າງໄມ້ | 30.4 | 29.6 |
| ແຮງງານບໍ່ມີທັກສະສີມື | 0.7 | 0.0 |
| ລວມ | 100 | 100 |

***ແຫຼ່ງຂໍ້ມູນ:*** *ກະຊວງແຮງງານ ແລະ ສະຫວັດດີການສັງຄົມ (2008)*

74 ການປ່ຽນແປງວຽກງານລະຫວ່າງຮຸ່ນຄົນໃນຕະຫຼາດແຮງງານຂອງຂະແໜງວຽກຂັ້ນຕໍ່າຢູ່ອາຊີ ໂດຍທົ່ວໄປແລ້ວ ຊ່ວຍໃຫ້ຫຼຸດພົ້ນອອກຈາກຄວາມທຸກຍາກ. ເບິ່ງ Acharya ແລະ Jose (1991); Deshpande ແລະ Deshpande (1990).

75 ເນື່ອງຈາກວ່າ ໃນກຸ່ມຕົວແທນມີແຮງງານປ່ຽນວຽກສອງເທື່ອຈຳນວນໜ້ອຍ, ການວິໄຈຢູ່ທີ່ນີ້ ຈະອີງໃສ່ວຽກປະຈຸບັນ ແລະ ວຽກທີ່ຜ່ານມາເທົ່ານັ້ນ. ໃນບັນດາເຫດຜົນທີ່ມີການປ່ຽນວຽກໜ້ອຍແມ່ນແຮງງານມີອາຍຸຍັງໜ້ອຍ

**ຮູບສະແດງ 5.2: ອັດຕາສ່ວນຂອງແຮງງານແຈກຢາຍຕາມເຫດຜົນການປ່ຽນວຽກ**




***ແຫຼ່ງຂໍ້ມູນ:*** *ກະຊວງແຮງງານ ແລະ ສະຫວັດດີການສັງຄົມ (2008).*

ເຫດຜົນຕົ້ນຕໍສີ່ປະການຂອງການປ່ຽນວຽກ:

1. ການຊອກຫາລາຍຮັບທີ່ສູງກວ່າ (ຍ້ອນລາຍຮັບຕ່ຳ ແລະ ບໍ່ປົກກະຕິໃນເມື່ອກ່ອນ)

2. ບໍ່ພໍໃຈກັບວຽກໃນເມື່ອກ່ອນ,

3. ວຽກໃນເມື່ອກ່ອນ 'ບໍ່ໝັ້ນຄົງ'; ອາດຈະຖືກປົດອອກເມື່ອໃດກໍ່ໄດ້,

4. ການປິດກິດຈະການ ແລະ ການມີແຮງງານເຫຼືອຄວາມຕ້ອງການໃນບ່ອນເຮັດວຽກ

ບຸກຄົນປ່ຽນວຽກຍ້ອນເຫດຜົນທີ (1) ຫຼື (2) ຂ້າງເທິງ (ຊຶ່ງເປັນປັດໄຈຍູ້) ມີປະມານ 49% (ຮູບສະແດງ 5.2). ໃນທຳນອງດຽວກັນ, ບຸກຄົນທີ່ຢູ່ໃນກຸ່ມ (3) ແລະ (4) (ຊຶ່ງມີ 44%) ອາດຖືກຈັດຢູ່ໃນກຸ່ມທີ່ຖືກ 'ປັດ ໄຈຍູ້' ໃຫ້ອອກໄປຊອກວຽກຂອງເຂົາເຈົ້າ, ໝາຍຄວາມວ່າເຂົາເຈົ້າຖືກຜັກດັນໃຫ້ອອກໄປ. ດັ່ງນັ້ນ, ໃນເມື່ອວ່າປັດໄຈດຶງມີຄວາມສຳຄັນ, ປັດໄຈຍູ້ກໍ່ມີຄວາມສຳຄັນເຊັ່ນດຽວກັນ. ສະຫຼຸບແລ້ວ, ກົນໄກຕະຫຼາດບໍ່ແມ່ນຈະດີສະເໝີໄປເພາະວ່າບາງຄົນກໍ່ມີຄວາມກ້າວໜ້າດີ ແລະ ອາດມີບາງຄົນກຖອຍຫຼັງ.

ການປ່ຽນແປງດ້ານລາຍຮັບເປັນສິ່ງບອກໃຫ້ຮູ້ໄດ້ທັງໝົດກ່ຽວກັບວຽກຂອງປະຊາຊົນ: ຖ້າປະຊາຊົນສາມາດ ເພີ່ມລາຍຮັບຂອງເຂົາເຈົ້າໄດ້ຈາກການປ່ຽນວຽກກໍ່ຖືວ່າການປ່ຽນວຽກເປັນສິ່ງທີ່ດີສຳລັບເຂົາເຈົ້າ. ຖ້າບໍ່ດັ່ງນັ້ນ, ກໍ່ສະແດງວ່າ ເຂົາເຈົ້າປ່ຽນວຽກຍ້ອນຄວາມຈຳເປັນ. ໃນຈຳນວນຜູ້ທີ່ໄດ້ປ່ຽນວຽກ, ເກືອບ 15% ແມ່ນມີລາຍຮັບຫຼຸດລົງ ເມື່ອຄິດໄລ່ເປັນມູນຄ່າເງິນກີບ, ໃນຂະນະທີ່ອີກ 21% ແມ່ນບໍ່ມີການປ່ຽນແປງຫຍັງ (ຮູບສະແດງ 5.3). ເນື່ອງຈາກວ່າໃນລະຫວ່າງ ປີ 2003 ແລະ 2007 ລາຄາສິນຄ້າເພີ່ມຂຶ້ນເກືອບ 50%, ສຳລັບຜູ້ທີ່ ປ່ຽນວຽກແຕ່ບໍ່ມີລາຍຮັບເພີ່ມຂຶ້ນຕາມສະພາບຂອງລາຄາໃນໄລຍະນັ້ນ ກໍ່ສາມາດເວົ້າໄດ້ວ່າລາຍຮັບຂອງເຂົາເຈົ້າຫຼຸດລົງ. ດັ່ງນັ້ນ, ຈຶ່ງເຫັນໄດ້ວ່າຈຳນວນແຮງງານທັງໝົດ 36% ໄດ້ສູນເສຍລາຍຮັບຂອງຕົນເອງໄປ. ຖ້າເຮົາສົມມຸດວ່າຜູ້ທີ່ປ່ຽນວຽກມີລາຍຮັບເພີ່ມຂຶ້ນຮອດ 50% ຕາມລາຄາໃນປີນັ້ນກໍ່ຖືວ່າເຂົາເຈົ້າຍັງຄົງຮັກສາລະດັບລາຍຮັບຄືກັບໃນເມື່ອກ່ອນ. ສະນັ້ນ, ໝາຍຄວາມວ່າມີແຮງງານ 20% ຍັງຄົງຮັກສາລາຍຮັບຂອງຕົນເອງໄວ້ໃນລະດັບເກົ່າ. ດັ່ງນັ້ນ, ແຮງງານທີ່ປ່ຽນວຽກ ແລະ ມີລາຍຮັບເພີ່ມຂຶ້ນຫຼາຍກວ່າ 50% ໃນຊ່ວງປີທີ່ລາຄາສິນຄ້າເພີ່ມຂຶ້ນແມ່ນ ຜູ້ທີ່ໄດ້ປະໂຫຍດຈາກການປ່ຽນວຽກແທ້ໆ, ຊຶ່ງມີປະມານ 44% ຂອງແຮງງານທັງໝົດທີ່ປ່ຽນວຽກໃນໄລຍະນັ້ນ. ສຳລັບການເພີ່ມຂຶ້ນຂອງລາຍຮັບ ຫຼັງຈາກມີການປ່ຽນວຽກຂອງແຮງງານ ທີ່ໄດ້ຮັບການສຶກສາໃນລະດັບ 'ສູງກວ່າລະດັບປະຖົມ' ແມ່ນມີສູງກວ່າຜູ້ທີ່ຮຽນ 'ບໍ່ກາຍລະດັບປະຖົມ'. ກົງກັນຂ້າມ, ໃນຈຳນວນຜູ້ທີ່ມີການສຶກສາດີກວ່າ ມີພຽງແຕ່ 28% ເທົ່ານັ້ນສູນເສຍລາຍຮັບໃນເວລາປ່ຽນວຽກ. ສ່ວນກຸ່ມແຮງງານທີ່ມີລະດັບການສຶກສາຕ່ຳກວ່າ (ຫຼືບໍ່ມີ) ແມ່ນມີເຖິງ 49% ໄດ້ສູນເສຍລາຍຮັບຂອງຕົນໄປໃນເວລາປ່ຽນວຽກ. ດັ່ງນັ້ນ, ການສຶກສາ ແລະ ທັກສະສີມື ແມ່ນເຄື່ອງມືທີ່ມີປະສິດທິພາບສູງໃນການຍາດແຍ່ງເອົາຜົນປະໂຫຍດຈາກການປ່ຽນວຽກ.

ສະຫຼຸບລວມແລ້ວ, ການປ່ຽນວຽກ ໄດ້ຊ່ວຍໃຫ້ປະຊາຊົນໄດ້ຍົກສູງຖານະບົດບາດຂອງເຂົາເຈົ້າໃນຕະຫຼາດແຮງງານຕື່ມອີກບໍ່? ຄຳຕອບຕໍ່ຄຳຖາມນີ້ຍັງບໍ່ມີຄວາມຊັດເຈນເທື່ອ.

*ດ້ານດີ:* ປະຊາຊົນໄດ້ປ່ຽນວຽກຂອງຕົນເອງ ອອກຈາກຂະແໜງກະສິກຳ ໄປສູ່ຂະແໜງການອື່ນ; ຖ້າທຽບໃສ່ໃນເມື່ອກ່ອນຈະເຫັນວ່າເຂົາເຈົ້າເຮັດວຽກໃຫ້ແກ່ຕົນເອງ ຫຼື ເປັນແຮງງານອິດສະຫຼະ (ຫຼື ເຮັດທຸລະກິດຂອງຕົນເອງ) ຫຼາຍຂຶ້ນ; ແຮງງານຫຼາຍກວ່າ 50% ໄດ້ປ່ຽນວຽກ ອອກຈາກຂະແໜງການດັ່ງກ່າວຍ້ອນ 'ປັດໄຈຕ່າງໆ

**ຮູບສະແດງ 5.3: ອັດຕາສ່ວນຂອງແຮງງານແຈກຢາຍຕາມລະດັບການປ່ຽນແປງຂອງລາຍຮັບທີ່ໄດ້ໃນລະ ຫວ່າງການເຮັດວຽກໃນເມື່ອກ່ອນ ແລະ ປະຈຸບັນ**




***ແຫຼ່ງຂໍ້ມູນ:** ກະຊວງແຮງງານ ແລະ ສະຫວັດດີການສັງຄົມ (2008)*

ທີ່ດຶງດູດເຂົາເຈົ້າອອກໄປ'; ແລະ ແຮງງານປະມານ 44% ມີລາຍຮັບເພີ່ມຂຶ້ນ-ຕົວຊີ້ບອກເຫຼົ່ານີ້ ຊີ້ໃຫ້ເຫັນວ່າ ການປ່ຽນວຽກເຮັດໃຫ້ໄດ້ຮັບຜົນປະໂຫຍດຫຼາຍຂຶ້ນ.

*ດ້ານອ່ອນ:* ຖານະບົດບາດຂອງແຮງງານບາງຄົນບໍ່ດີຄືກັນກັບຮຸ່ນພໍ່ແມ່ຂອງເຂົາເຈົ້າ; ຫຼາຍຄົນກໍ່ໄດ້ຖືກ 'ຜັກດັນ' ໃຫ້ອອກຈາກວຽກ (ທຳອິດ) ຂອງເຂົາເຈົ້າ; ແລະ ສ່ວນໃຫຍ່ແມ່ນສູນເສຍລາຍຮັບ, ຊຶ່ງທັງໝົດເຫຼົ່ານີ້ ແມ່ນຕົວຊີ້ບອກໃຫ້ເຫັນຜົນເສຍ ຂອງການປ່ຽນວຽກ.

ສັງເກດເຫັນໄດ້ວ່າຖ້າເບິ່ງໃນແງ່ການປ່ຽນວຽກຄືກັບປະເທດອື່ນໆ ທີ່ມີການຂະຫຍາຍໂຕ ຂອງລວມຍອດຜະລິດຕະພັນພາຍໃນ ໃນໄລຍະ 15-20 ປີ ຜ່ານມາ, ຕະຫຼາດແຮງງານໃນຂະແໜງວຽກທີ່ມີລາຍຮັບຕ່ຳໃນຕົວເມືອງຢູ່ ລາວ ບໍ່ໄດ້ຮັບຜົນກະທົບຈາກການຈະເລີນເຕີບໂຕຂອງເສດຖະກິດ.

## ການຫວ່າງງານ ແລະ ຄວາມບໍ່ແນ່ນອນ ຂອງການມີວຽກເຮັດງານທຳ

ໃນສະພາບການທີ່ລະບົບປະກັນສັງຄົມຍັງມີຄວາມຈຳກັດ ນອກໄປຈາກການຊ່ວຍເຫຼືອຂອງໝູ່ເພື່ອນ ແລະ ຍາດພີ່ນ້ອງ, ແຕ່ການໄດ້ມາຊຶ່ງການຊ່ວຍເຫຼືອດັ່ງກ່າວຈະປາດສາຈາກຄ່າໃຊ້ຈ່າຍ- ແຮງງານບໍ່ມີທາງອື່ນທີ່ຈະຢູ່ລອດໃນຕົວເມືອງໄດ້ນອກຈາກຈະອາໄສລາຍຮັບຈາກວຽກເຮັດຢູ່ປະຈຸບັນ. ສິ່ງດັ່ງກ່າວນີ້ຄືສະພາບຕົວ ຈິງໃນເມື່ອແຮງງານເກືອບ 95% ແມ່ນມີລາຍຮັບຈາກພຽງແຫຼ່ງດຽວເທົ່ານັ້ນກໍ່ຄືວຽກທີ່ເຂົາເຈົ້າເຮັດຢູ່ໃນປະຈຸບັນ. ດັ່ງນັ້ນ, ການມີວຽກເຮັດງານທຳແບບຕໍ່ເນື່ອງ ແລະ ໝັ້ນຄົງຈຶ່ງມີຄວາມສຳຄັນຫຼາຍຕໍ່ການຮັບປະກັນຄວາມໝັ້ນຄົງຂອງການດຳລົງຊີວິດຂອງເຂົາເຈົ້າ.

ການຫວ່າງງານ ແລະ ຄວາມບໍ່ແນ່ນອນຂອງວຽກແມ່ນຕົວຊີ້ບອກທີ່ເໝາະສົມທີ່ສຸດໃນການປະເມີນຄວາມບໍ່ໝັ້ນຄົງຂອງວຽກງານ. ໃນວັກຕໍ່ໄປຂອງພາກນີ້ ຈະໄດ້ພິຈາລະນາສາມບັນຫາຄື:

1. ໃນປີຜ່ານມາແຮງງານໄດ້ພັກວຽກຢ່າງບໍ່ສະໝັກໃຈບໍ່?
2. ແຮງງານຮູ້ສຶກວ່າວຽກງານທີ່ເຮັດຢູ່ໃນປະຈຸບັນນີ້ມີຄວາມໝັ້ນຄົງບໍ່?
3. ແຮງງານຄິດວ່າເຂົາເຈົ້າໄດ້ເຮັດວຽກບໍ່ເຕັມມາດຕະຖານເວລາບໍ່?

**ຕາຕະລາງ 5.3: ອັດຕາສ່ວນຂອງແຮງງານທີ່ເຄີຍປະສົບກັບການບໍ່ມີວຽກຢ່າງບໍ່ຕັ້ງໃຈໃນເວລາໃດໜຶ່ງໃນປີຜ່ານມາ**

| | |
|---|---|
| ລວມ | 12.7 |
| ຊາຍ | 11.1 |
| ຍິງ | 13.7 |
| ປະກອບອາຊີບອິດສະຫຼະ | 11.1 |
| ແຮງງານຮັບຈ້າງ | 14.2 |
| ແຮງງານໄດ້ຮັບການສຶກສາຮອດ 5 ປີ | 10.6 |
| ໄດ້ຮັບການສຶກສາ > 5 ປີ | 13.8 |

***ແຫຼ່ງຂໍ້ມູນ:** ກະຊວງແຮງງານ ແລະ ສະຫວັດດີການສັງຄົມ (2008)*

### ກ່ອງ 5.2: ການໃຫ້ພະນັກງານຮ້ານອາຫານຢູ່ປາກເຊຢຸດວຽກ

ຂ້ອຍຍັງຢູ່ໃນໄວໜຸ່ມ . ຂ້ອຍເຮັດວຽກຢູ່ເມືອງນີ້ຕັ້ງແຕ່ສອງປີກ່ອນ. ປະຈຸບັນ, ຂ້ອຍເຮັດວຽກຢູ່ຮ້ານອາຫານ. ໃນລະດູຝົນ, ຂ້ອຍມັກກັບບ້ານໄປຊ່ວຍພໍ່ແມ່ເຮັດນາ. ເຂົາເຈົ້າຕ້ອງການໃຫ້ຂ້ອຍໄປຊ່ວຍເພາະບໍ່ມີຄົນເບິ່ງນາໃນລະດູນີ້. ຂ້ອຍເຮັດວຽກຢູ່ຮ້ານຂາຍອາຫານຈົນມາຮອດປີກາຍນີ້. ເມື່ອຂ້ອຍຕ້ອງໄດ້ກັບໄປບ້ານເພື່ອຊ່ວຍພໍ່ແມ່, ຂ້ອຍກໍ່ຕ້ອງໄດ້ອອກຈາກວຽກເພາະຮ້ານນັ້ນບໍ່ໃຫ້ລາພັກ. ເມື່ອຂ້ອຍກັບມາກໍ່ຕ້ອງໄດ້ຊອກວຽກໃໝ່ເຮັດ ແລະ ກວ່າຈະໄດ້ວຽກປະຈຸບັນກໍ່ຕ້ອງຢູ່ລ້າໆໄປຫຼາຍອາທິດ.

ການປ່ຽນວຽກໃໝ່ຢູ່ເລື້ອຍໆອາດເຮັດໃຫ້ສູນເສຍລາຍຮັບ. ນອກຈາກນີ້, ບໍ່ແມ່ນຈະເປັນໄປໄດ້ເລື້ອຍໆທີ່ຈະໄດ້ວຽກເຮັດໃນອາຊີບທີ່ເຄີຍເຮັດ ແລະ ເຄີຍມີປະສົບການມາແລ້ວ. ຂ້ອຍເຄີຍມີຄວາມກັງວົນໃຈຫຼາຍເວລາລໍຖ້າວຽກໃໝ່. ທັງໝົດເຫຼົ່ານີ້ເກືອບຈະເຮັດໃຫ້ຂ້ອຍບໍ່ສາມາດ 'ພັດທະນາຕົນເອງ' ຫຼື ກ້າວເຂົ້າສູ່ຕະຫຼາດແຮງງານໄດ້.

### ກ່ອງ 5.3: ຄວາມຈຳເປັນໃນການໃຫ້ການສະໜັບສະໜູນແກ່ແຮງງານທີ່ປະກອບອາຊີບອິດສະຫຼະ

ຄຳເວົ້າກ່ຽວກັບການປະກອບອາຊີບອິດສະຫຼະໃນກຸ່ມຕົວແທນນີ້ມີຢູ່ວ່າ: ວຽກງານຂອງຂະແໜງການນີ້ ຕົ້ນຕໍແມ່ນການຄ້າຂາຍຍ່ອຍ ເຖິງແມ່ນວ່າ ບາງວິສາຫະກິດຢູ່ໃນຂະແໜງດັ່ງກ່າວ ຈະເຮັດກິດຈະກຳອື່ນເຊັ່ນກັນກໍ່ຕາມ. ວິສາຫະກິດເຫຼົ່ານີ້ແຕ່ລະແຫ່ງເປັນວິສາຫະກິດຂະໜາດນ້ອຍໂພດ ຊຶ່ງບໍ່ສາມາດທີ່ຈະນຳໄປທຽບກັບວິສາຫະກິດຂະໜາດນ້ອຍ ແລະ ຂະໜາດກາງໄດ້. ບຸກຄົນທີ່ເຮັດວຽກຢູ່ໃນຂະແໜງວຽກຂັ້ນຕໍ່າມັກຈະປະກອບອາຊີບອິດສະຫຼະຫຼາຍກວ່າເຮັດວຽກຮັບຈ້າງທົ່ວໄປ. ວິສາຫະກິດຈຸລະພາກເຫຼົ່ານີ້ ສາມາດເຮັດໃຫ້ມີຄວາມໝັ້ນຄົງໄດ້ຫຼາຍກວ່າສະພາບທີ່ເປັນຢູ່ໃນປະຈຸບັນ ໂດຍໃຫ້ການຊ່ວຍເຫຼືອພຽງເລັກໜ້ອຍ. ຈຸດເລີ່ມຕົ້ນ ກໍ່ຄືການຮັບຮູ້ທຸລະກິດຕາມກົດໝາຍ ເຖິງແມ່ນວ່າຜູ້ຄ້າຂາຍສິນຄ້ານັ້ນຈະມີທີ່ຢູ່ຖາວອນ ຫຼື ບໍ່ກໍ່ຕາມ. ໃນຫຼາຍປະເທດ, ເຂົາເຈົ້າໄດ້ຮັບໃບອະນຸຍາດດຳເນີນທຸລະກິດໂດຍບໍ່ໄດ້ເສຍຄ່າ. ການຮັບຮູ້ທາງດ້ານກົດໝາຍ ຍັງເປີດໂອກາດໃຫ້ທຸລະກິດຂອງເຂົາເຈົ້າໄດ້ຮັບການຈັດຕັ້ງ ແລະ ດຳເນີນໄປຢ່າງເປັນທາງການ ຊຶ່ງເປັນຜົນດີໃຫ້ແກ່ທຸລະກິດໃນເວລາສະເໜີບັນຫາຕ່າງໆຕໍ່ອຳນາດການປົກຄອງ. ນອກຈາກນີ້, ອົງການຈັດຕັ້ງຕ່າງໆທີ່ກ່ຽວຂ້ອງກັບເຂົາເຈົ້າ ຍັງສາມາດໃຫ້ການຊ່ວຍເຫຼືອທຸລະກິດຂອງເຂົາເຈົ້າໄດ້ ເຊັ່ນວ່າ ມີສິ່ງອຳນວຍຄວາມສະດວກຫຼາຍຢ່າງທີ່ເປັນຂອງສ່ວນລວມ ເຊັ່ນ ຕູ້ແຊ່ເຢັນ (ຫຼື ພາຫານະຂົນສົ່ງ) ທີ່ວິສາຫະກິດຈຸລະພາກເຫຼົ່ານີ້ບໍ່ສາມາດຈັດຫາມາດ້ວຍຕົນເອງໄດ້ ແຕ່ວ່າມີຄວາມຈຳເປັນຕ້ອງໃຊ້. ຖ້າມີການຕອບສະໜອງການບໍລິການເຫຼົ່ານີ້ໃນລັກສະນະຫຸ້ນສ່ວນກັນ, ຜູ້ນຳໃຊ້ທຸກຄົນກໍ່ຈະມີຄວາມພໍໃຈຈ່າຍ ເພາະມັນຊ່ວຍຫຼຸດຜ່ອນຄ່າສິ້ນເປືອງ ແລະ ຕົ້ນທຶນໄດ້. ຍົກຕົວຢ່າງວ່າ ຄົນຂາຍອາຫານຜູ້ໜຶ່ງ ອາດເກັບຮັກສາອາຫານທີ່ຍັງບໍ່ທັນໄດ້ຂາຍໄວ້ໃນຕອນແລງໄດ້, ຊຶ່ງໃນປະຈຸບັນນີ້ລາວບໍ່ສາມາດເກັບມ້ຽນອາຫານໄວ້ໄດ້ເພາະບໍ່ມີຕູ້ແຊ່ເຢັນ. ສິ່ງອຳນວຍຄວາມສະດວກລວມທີ່ຜູ້ຂາຍຫຼາຍຄົນສາມາດນຳໃຊ້ໄດ້ສາມາດຊ່ວຍເກັບຮັກສາອາຫານ ແລະ ເຮັດໃຫ້ແຕ່ລະຄົນມີຜົນກຳໄລ. ນອກຈາກນີ້ແລ້ວ ກໍ່ຍັງມີຫຼາຍວິທີທີ່ໄດ້ປະຕິບັດກັນຢູ່ບ່ອນອື່ນໆ ເຊັ່ນ: ສິ່ງອຳນວຍຄວາມສະດວກດ້ານສິນເຊື່ອຈຸລະພາກ, ການຍົກລະດັບທັກສະສີມືແຮງງານ ແລະ ບາງມາດຕະການກ່ຽວກັບການປະກັນສັງຄົມ ເຊັ່ນ: ການປະກັນສັງຄົມຈຸລະພາກເປັນຕົ້ນ.

ອົງການຈັດຕັ້ງຂອງຊຸມຊົນຕ້ອງການຝຶກອົບຮົມບາງດ້ານ - ເບິ່ງບົດທີ 6.
***ເບິ່ງ:*** *ILO (2001a); ILO (2001b)*

ໃນໜຶ່ງປີທີ່ຜ່ານມາ ແຮງງານຮັບຈ້າງທົ່ວໄປປະມານ 13% ເຄີຍພົບກັບສະພາບບໍ່ມີວຽກເຮັດງານທຳ ຫຼື ການພັກວຽກຢ່າງບໍ່ສະໝັກໃຈ (8% ໃນສາມເດືອນຜ່ານມາ) (ຕາຕະລາງ 5.3). ຖ້າສຶກສາຢ່າງເລິກເຊິ່ງແລ້ວ, ຈະເຫັນວ່າມີຫຼາຍກໍລະນີທີ່ແຮງງານ(ທັງຍິງ ແລະ ຊາຍ) ລາພັກໄປຢ້ຽມຢາມຄອບຄົວຖືກນາຍຈ້າງຮັບເອົາຄົນອື່ນເຂົ້າແທນ. ຖ້າເຫັນວ່າຜູ້ທີ່ມາແທນເຮັດວຽກໄດ້ດີກວ່າ, ນາຍຈ້າງກໍ່ຈະສືບຕໍ່ຈ້າງຜູ້ນັ້ນແທນຜູ້ທີ່ລາພັກກັບບ້ານເລີຍ ແລະ ຈະເຮັດໃຫ້ຜູ້ລາພັກນັ້ນເສຍວຽກໄປ. ໃນຕົວຈິງ, ສິ່ງດັ່ງກ່າວກໍ່ແມ່ນເຫດຜົນໜຶ່ງທີ່ເຮັດໃຫ້ແຮງງານຮັບຈ້າງຈຳນວນຫຼາຍປະສົບກັບບັນຫາຍ້ອນການລາພັກວຽກຫຼາຍຂຶ້ນ (ກ່ອງ 5.2). ສຳລັບແຮງງານທີ່ປະກອບອາຊີບອິດສະຫຼະ, ການສູນເສຍວຽກງານ ແມ່ນຍ້ອນການປິດກິດຈະການຂອງຕົນເອງ. ເຫດຜົນຂອງການປິດກິດຈະການທີ່ເວົ້າເຖິງເລື້ອຍທີ່ສຸດກໍ່ແມ່ນຍ້ອນການຂາດທຶນບໍລິຫານ, ຕົ້ນທຶນສູງ, ທຶນໝູນວຽນ/ຍອດຂາຍຕໍ່າ ແລະ ຍ້ອນການເຈັບເປັນ. ແຮງງານເພດຍິງມັກຈະຖືກຢຸດວຽກຫຼາຍກວ່າແຮງງານຜູ້ຊາຍຍ້ອນການຖືພາອອກລູກ. ເຖິງຢ່າງໃດກໍ່ຕາມ,ຖ້າສະພາບທີ່ເກີດຂຶ້ນຕາມພາວະວິໄສ (ເຊັ່ນ: ການຖືພາອອກລູກ) ຫາກເປັນສິ່ງກີດກັ້ນການສືບຕໍ່ເຮັດວຽກຂອງແຮງງານກໍ່ສະແດງວ່າວຽກດັ່ງກ່າວບໍ່ສອດຄ່ອງກັບຫຼັກການວຽກທີ່ມີຄຸນຄ່າ.

ຈາກການຕອບຄຳຖາມທີ່ວ່າ ແຮງງານເຫຼົ່ານັ້ນຮູ້ສຶກໝັ້ນຄົງໃນວຽກຂອງເຂົາເຈົ້າຫຼືບໍ່ (ເຊັ່ນ: ເຂົາເຈົ້າຮູ້ສຶກຢ້ານບໍ່ວ່າຈະເສຍວຽກໄປ ແລະ ຄວາມຢ້ານດັ່ງກ່າວຢືນຢັນໄດ້ດ້ວຍເຫດຜົນ ຫຼື ຂໍ້ພິສູດ ຫຼື ບໍ່) ໄດ້ຊີ້ໃຫ້ເຫັນວ່າ ມີແຮງງານຫຼາຍເຖິງ 64% ຮູ້ສຶກວ່າຂາດຄວາມໝັ້ນຄົງໃນລະດັບໃດໜຶ່ງ. ຜູ້ທີ່ປະເຊີນກັບບັນຫານີ້ຫຼາຍກວ່າໝູ່ກໍ່ແມ່ນແຮງງານແມ່ຍິງ, ແຮງງານປະກອບອາຊີບອິດສະຫຼະ, ຜູ້ທີ່ມີການສຶກສາຕໍ່າ, ແຮງງານໃນຂະແໜງບໍລິການ, ແຮງງານໄວໜຸ່ມ ແລະ ສຸດທ້າຍກໍ່ແມ່ນແຮງງານທີ່ບໍ່ໄດ້ໄປເຮັດວຽກຢູ່ຕ່າງປະ

**ຮູບສະແດງ 5.4: ອັດຕາສ່ວນຂອງແຮງງານໃນແຕ່ລະຄຸນລັກສະນະ ແບ່ງຕາມຄວາມຮູ້ສຶກຕໍ່ຄວາມໝັ້ນຄົງໃນວຽກ**




***ແຫຼ່ງຂໍ້ມູນ:** ກະຊວງແຮງງານ ແລະ ສະຫວັດດີການສັງຄົມ (2008).*

**ຮູບສະແດງ 5.5: ອັດຕາສ່ວນຂອງແຮງງານທີ່ຮູ້ສຶກວ່າມີການເຮັດວຽກບໍ່ເຕັມເວລາມາດຕະຖານ ແບ່ງຕາມ ຄຸນລັກສະນະ**




***ແຫຼ່ງຂໍ້ມູນ:** ກະຊວງແຮງງານ ແລະ ສະຫວັດດີການສັງຄົມ (2008).*

ເຫດ (ຮູບສະແດງ 5.4). ຮູບແບບບາງສ່ວນກໍ່ເປັນໄປຢ່າງສົມເຫດສົມຜົນ; ສ່ວນຮູບແບບອື່ນໆນັ້ນຈະຕ້ອງໄດ້ສຶກສາລະອຽດຕື່ມ.

ຕໍ່ກັບຄຳຖາມທີ່ວ່າບຸກຄົນເຫຼົ່ານັ້ນຮູ້ສຶກວ່າເຂົາເຈົ້າເຮັດວຽກຕໍ່າກວ່າກຳນົດມາດຕະຖານເວລາ ແລະ ຕ້ອງການເຮັດວຽກເພີ່ມ ຫຼື ບໍ່ນັ້ນແມ່ນໃຫ້ເບິ່ງຄຳຕອບໃນຮູບສະແດງ 5.5. ໃນນັ້ນ, ຈະເຫັນໄດ້ວ່າປະມານ 1/4 ຂອງແຮງງານທັງໝົດຕ້ອງການເຮັດວຽກເພີ່ມ ຫຼື ຕ້ອງການວຽກເສີມ. ຕົວເລກອັນນີ້ຊີ້ໃຫ້ເຫັນວ່າ ແຮງງານບໍ່ມີຄວາມພໍໃຈກັບວຽກຕົນເອງເຮັດຢູ່ປານໃດ ແລະ/ຫຼື ມີຄວາມຕ້ອງການຍ້າຍວຽກຫຼາຍກວ່າ.

ຄວາມເປັນຈິງກໍ່ຄື ຜູ້ເຮັດວຽກທີ່ປະສົບກັບບັນຫາການພັກວຽກຢູ່ເລື້ອຍໆ ເຮັດໃຫ້ເຂົາເຈົ້າເກີດຄວາມເບື່ອໜ່າຍຕໍ່ການຫວ່າງງານ ແລະ ຄວາມບໍ່ແນ່ນອນໃນວຽກງານ. ບັນຫານີ້ມີລັກສະນະຄ້າຍຄືກັບສະພາບທີ່ເກີດຂຶ້ນຢູ່ເຂດຊົນນະບົດ.

## *ສະຫຼຸບຫຍໍ້:*

1. *ກົນໄກການຈັດຕັ້ງລະບົບຂໍ້ມູນຂ່າວສານກ່ຽວກັບຕະຫຼາດແຮງງານສຳລັບແຮງງານໃນຂະແໜງວຽກທີ່ມີລາຍຮັບຕໍ່າຢູ່ເຂດຕົວເມືອງຍັງບໍ່ມີ ຫຼື ຖ້າມີກໍ່ບໍ່ຫຼາຍ. ເພາະສະນັ້ນ, ການສ້າງຕັ້ງລະບົບກົນໄກເຫຼົ່ານີ້ຂຶ້ນມາເປັນສິ່ງທີ່ຈຳເປັນ ແລະ ສຳຄັນທີ່ສຸດ.*

2. *ການປ່ຽນວຽກຂອງແຮງງານໃນຂະແໜງວຽກທີ່ມີລາຍຮັບຕໍ່າມີຈຳນວນໜ້ອຍ. ນອກຈາກນີ້, ທຸກຄົນທີ່ປ່ຽນວຽກບໍ່ແມ່ນວ່າຈະໄດ້ຮັບຜົນປະໂຫຍດເພີ່ມຂຶ້ນທັງໝົດ. ໃນຕົວຈິງ, ແຮງງານຫຼາຍຄົນໄດ້ເສຍຜົນປະໂຫຍດຈາກການປ່ຽນວຽກ; ບາງຄົນກໍ່ຖືກ 'ຊຸກຍູ້ໃຫ້ອອກ' ແລະ ຜູ້ອື່ນໆອີກຫຼາຍຄົນກໍ່ສູນເສຍລາຍຮັບໄປ. ດັ່ງນັ້ນ, ແຮງງານຫຼາຍຄົນຈຶ່ງບໍ່ມີ 'ຄວາມກ້າວໜ້າ' ຢູ່ໃນຕະຫຼາດແຮງງານ.*

3. *ການສະໜອງແຮງງານທີ່ມີຄຸນນະພາບ ແລະ ຄວາມຕ້ອງການແຮງງານຕ່າງໆກໍ່ຍັງບໍ່ທັນມີຄວາມເຂັ້ມແຂງ ຊຶ່ງບັນຫານີ້ໄດ້ຊີ້ໃຫ້ເຫັນເຖິງຄວາມຈຳເປັນທີ່ຈະຕ້ອງຊອກຫາຊ່ອງທາງເພື່ອຍົກລະດັບສີມືແຮງງານ; ຟື້ນຟູ ແລະ ສ້າງຄວາມເຂັ້ມແຂງໃຫ້ແກ່ເສດຖະກິດໃນຕົວເມືອງທີ່ຍັງອ່ອນນ້ອຍຢູ່.*

4. *ບາງຄັ້ງ, ແຮງງານຍັງປະສົບກັບການຫວ່າງງານ, ຄວາມບໍ່ໝັ້ນຄົງໃນໜ້າທີ່ການງານ ແລະ ການເຮັດວຽກບໍ່ເຕັມເວລາມາດຕະຖານ ຊຶ່ງເປັນຜົນໃຫ້ເຂົາເຈົ້າຕ້ອງສູນເສຍລາຍຮັບ ແລະ ເກີດຄວາມກັງວົນໃຈໃນ ການເຮັດວຽກ. ບັນຫານີ້ ສາມາດແກ້ໄຂໄດ້ໂດຍຜ່ານການສ້າງຄວາມສາມາດໃຫ້ແກ່ແຮງງານຢູ່ກັບບ່ອນເຮັດວຽກຕົວຈິງ ພ້ອມດ້ວຍຄວາມພະຍາຍາມເອົາໃຈໃສ່ເຮັດໃຫ້ວິສາຫະກິດຈຸລະພາກມີຄວາມໝັ້ນຄົງ ຫຼາຍຂຶ້ນ.*

## ເງື່ອນໄຂໃນການເຮັດວຽກ

ສາມາດເວົ້າໄດ້ບໍ່ວ່າ ສະພາບແວດລ້ອມໃນການເຮັດວຽກ ຂອງແຮງງານເຮັດວຽກຢູ່ໃນຂະແໜງວຽກທີ່ມີລາຍຮັບຕໍ່ານັ້ນ ແມ່ນສະພາບແວດລ້ອມທີ່ເໝາະສົມແລ້ວບໍ່? ຄຳຖາມກ່ຽວກັບບັນຫານີ້ທີ່ຕ່າງກັນອີກ ກໍ່ແມ່ນກ່ຽວຂ້ອງກັບສະພາບເງື່ອນໄຂໃນການເຮັດວຽກ, ຊົ່ວໂມງ ແລະ ມື້ເຮັດວຽກ ແລະ ຄວາມປອດໄພໃນອາຊີບການງານ.

### ສັນຍາແຮງງານ

ເງື່ອນໄຂຂອງວຽກງານເໝາະສົມ ແມ່ນຮຽກຮ້ອງໃຫ້ແຮງງານຕ້ອງມີສັນຍາແຮງງານ ທີ່ລະບຸລະອຽດຊັດເຈນ ເຖິງສິດ, ໜ້າທີ່ ແລະ ຜົນປະໂຫຍດທີ່ແຮງງານຄວນຈະໄດ້ຮັບ[76]. ເນື່ອງຈາກວ່າ ສັນຍາແມ່ນນຳໃຊ້ກັບແຮງງານຮັບຈ້າງເທົ່ານັ້ນ, ໃນພາກຍ່ອຍນີ້ຈະໄດ້ສົນທະນາກ່ຽວກັບກຸ່ມແຮງງານເຫຼົ່ານີ້ເທົ່ານັ້ນ. ແຮງງານສ່ວນໃຫຍ່ ໃນຈຳນວນແຮງງານໃນກຸ່ມຕ່າງໆເຫຼົ່ານີ້ບໍ່ມີສັນຍາແຮງງານ (ຕາຕະ

**ຕາຕະລາງ 5 4: ອັດຕາສ່ວນຂອງແຮງງານຮັບຈ້າງຕາມສະພາບທີ່ວ່າເຂົາເຈົ້າມີສັນຍາແຮງງານ ຫຼື ບໍ່**

| | ແບ່ງຕາມຂະແໜງການຍ່ອຍ | | | | ແບ່ງຕາມເພດ | |
|---|---|---|---|---|---|---|
| | ອຸດສາຫະກຳຕໍ່າແຜ່ນແພ ແລະ ຕັດຫຍິບ | ອຸດສາຫະກຳອື່ນໆ | ໂຮງແຮມ ແລະ ຮ້ານອາຫານ | ບໍລິການອື່ນໆ | ຊາຍ | ຍິງ |
| ມີສັນຍາ | 33.8 | 29 | 6.1 | 7.7 | 13.5 | 16.5 |
| ບໍ່ມີສັນຍາ | 66.2 | 71 | 93.9 | 92.3 | 86.5 | 83.5 |

| | ແບ່ງຕາມລະດັບການສຶກສາ | | ແບ່ງຕາມກຸ່ມອາຍຸ | | ແບ່ງຕາມການໄປເຮັດວຽກຕ່າງປະເທດ | |
|---|---|---|---|---|---|---|
| | ລະດັບປະຖົມ ແລະ ຕໍ່າກວ່າ | ສູງກວ່າປະຖົມ | 24 ປີ ແລະ ຕໍ່າກວ່າ | > 24 ປີ | ໄປເຮັດວຽກ ຕ່າງປະເທດ | ບໍ່ເຄີຍໄປ |
| ຖືສັນຍາ | 9.7 | 18.4 | 12.8 | 17.8 | 16.3 | 14.5 |
| ບໍ່ຖືມີສັນຍາ | 90.3 | 81.6 | 87.2 | 82.2 | 83.7 | 85.5 |

***ແຫຼ່ງຂໍ້ມູນ:*** *ກະຊວງແຮງງານ ແລະ ສະຫວັດດີການສັງຄົມ (2008).*

76 ອີງໃສ່ມາດຕາ 3 ແລະ 23 ຂອງກົດໝາຍແຮງງານ ສະບັບເລກທີ 06/ສພຊ ລົງວັນທີ 27 ທັນວາ 2006.





ຄວາມປອດໄພສາມາດຮັບປະກັນວຽກງານທີ່ມີຄຸນຄ່າໄດ້

ລາງ 5.4, ກ່ອງ 5.4). ເຖິງແມ່ນວ່າຢູ່ໂຮງງານຕັດຫຍິບທີ່ມີການບັງຄັບໃຊ້ກົດໝາຍເຂັ້ມງວດກວ່າກໍ່ຕາມ ແຕ່ກໍ່ຍັງມີແຮງງານພຽງແຕ່ໜຶ່ງສ່ວນສາມ ຂອງແຮງງານທັງໝົດເທົ່ານັ້ນ ມີສັນຍາແຮງງານ. ໂດຍທົ່ວໄປແລ້ວ, ສັດສ່ວນຂອງແຮງງານ ທີ່ມີສັນຍາແຮງງານສູງກວ່າແມ່ນກຸ່ມແຮງງານ ທີ່ມີລະດັບການສຶກສາດີ, ແຮງງານທີ່ມີອາຍຸສູງ ແລະ ແຮງງານແມ່ຍິງ.

ການຈ້າງແຮງງານ ເຖິງແມ່ນວ່າ ຢູ່ໃນຂະແໜງການທີ່ເອີ້ນວ່າເປັນທາງການ ເຊັ່ນ ຂະແໜງອຸດສາຫະກຳຕັດຫຍິບ ກໍ່ຍັງບໍ່ມີສັນຍາແຮງງານ. ນັ້ນກໍ່ໝາຍຄວາມວ່າ ນາຍຈ້າງມີທາງເລືອກທີ່ຈະຈ້າງ ແລະ ປົດປ່ອຍແຮງງານອອກໄດ້ຕາມໃຈມັກຂອງຕົນເອງເພື່ອຫຼຸດຕົ້ນທຶນ ແລະ ຄ່າໃຊ້ຈ່າຍອື່ນໆລົງ ເຖິງແມ່ນວ່າການກະທຳນັ້ນຈະເຮັດໃຫ້ແຮງງານເສຍຜົນປະໂຫຍດ ແລະ ຂັດຕໍ່ກົດໝາຍກໍ່ຕາມ.

## ຊົ່ວໂມງເຮັດວຽກ ແລະ ການລາພັກ

ການບັນທຶກນີ້ ແລະ ຊົ່ວໂມງເຮັດວຽກຂອງຜູ້ທີ່ປະກອບອາຊີບອິດສະຫຼະແມ່ນຂ້ອນຂ້າງສັບສົນເພາະວ່າ ແຮງງານເຫຼົ່ານີ້ ຈະເປີດຮ້ານໃນເວລາທີ່ເຂົາເຈົ້າ ສາມາດຂາຍສິນຄ້າຂອງຕົນ ໄດ້ຫຼາຍທີ່ສຸດ. ນອກຈາກນີ້, ແຮງງານທີ່ປະກອບອາຊີບອິດສະຫຼະສາມາດພັກຜ່ອນໄດ້ຕາມໃຈຖ້າເຂົາເຈົ້າເມື່ອຍ ຫຼື ມີວຽກສຸກເສີນທີ່ຕ້ອງໄປເຮັດ. ດັ່ງນັ້ນ, ຂໍ້ມູນເຫຼົ່ານີ້ຈຶ່ງບໍ່ໄດ້ຖືກເກັບກຳ. ເຖິງຢ່າງດກໍ່ຕາມ, ຜົນຂອງການສຳພາດທາງດ້ານຄຸນນະພາບສະແດງໃຫ້ເຫັນວ່າແຮງງານທີ່ປະກອບອາຊີບອິດສະຫຼະ ເອົາໃຈໃສ່ເຮັດວຽກດົນກວ່າເພື່ອໃຫ້ໄດ້ລາຍຮັບເພີ່ມພິເສດທີ່ຈຳເປັນເພື່ອການຢູ່ລອດຂອງເຂົາເຈົ້າ (ກ່ອງ 5.5).

ສະເລ່ຍຊົ່ວໂມງເຮັດວຽກໃນໜຶ່ງອາທິດຂອງແຮງງານຮັບຈ້າງສຳລັບແຮງງານເພດຊາຍ ແລະຍິງໃນທຸກຂະແໜງການຍ່ອຍແມ່ນຫຼາຍກວ່າ 55 ຊົ່ວໂມງ, ຊຶ່ງສູງກວ່າຊົ່ວໂມງເຮັດວຽກທີ່ລັດຖະບານກຳນົດໄວ້ໃນກົດໝາຍແຮງງານ (48 ຊົ່ວໂມງ)[77]. ແຮງງານຫຼາຍກວ່າເຄິ່ງເຮັດວຽກເຕັມ 7 ມື້ໃນໜຶ່ງອາທິດ ແລະ ຫຼາຍກວ່າ 80% ມີມື້ພັກສະເພາະແຕ່ວັນພັກເປັນທາງການເທົ່ານັ້ນ. ແຮງງານເພດຍິງມັກຈະເຮັດວຽກເກີນເວລາ ເພື່ອໃຫ້ໄດ້ລາຍຮັບເພີ່ມຂຶ້ນ. ດັ່ງນັ້ນ, ເມື່ອທຽບໃສ່ແຮງງານຜູ້ຊາຍເຫັນວ່າແຮງງານແມ່ຍິງເຮັດວຽກດົນກວ່າໜ້ອຍໜຶ່ງ. ເຖິງຢ່າງໃດກໍ່ຕາມ, ການຈ່າຍເງິນລ່ວງເວລາໃຫ້ແກ່ແຮງງານເຮັດວຽກໃນຂະແໜງອຸດສາຫະກຳຕັດຫຍິບແມ່ນມີໜ້ອຍຫຼາຍ[78]. ການສຶກສາວິໄຈຕ່າງໆໄດ້ຊີ້ໃຫ້ເຫັນວ່າການເຮັດວຽກດົນມີຜົນກະທົບບໍ່ດີຕໍ່ສຸຂະພາບຂອງແຮງງານ. ຄວາມເມື່ອຍລ້າ, ການນອນບໍ່ພຽງພໍ ແລະ ຄວາມບໍ່ເຂັ້ມແຂງຂອງຮ່າງກາຍມີຄວາມສ່ຽງຕໍ່ການເຈັບເປັນງ່າຍ. ຮ່າງກາຍທີ່ເຮັດວຽກຫຼາຍເກີນໄປຈະເມື່ອຍລ້າໄວກວ່າ ແລະ ຈະເຮັດໃຫ້ອາຍຸສັ້ນລົງ (ເບິ່ງກ່ອງ 5.6)[79].

77 ອີງຕາມກົດໝາຍແຮງງາລາວສະບັບປັບປຸງ ປີ 1994. ອົງການ ILO ຍັງໄດ້ສະເໜີແນະໃຫ້ເຮັດວຽກບໍ່ກາຍ 48 ຊົ່ວໂມງຕໍ່ອາທິດ ເຖິງແມ່ນວ່າ ການສະເໜີແນະນັ້ນຈະລວມເຖິງບາງວັກທີ່ລະບຸກ່ຽວກັບຫຼາຍປະເພດວຽກທີ່ແຕກຕ່າງກັນເຊັ່ນ: ມີມາດຕາສະເພາະສຳລັບແຮງງາຂຸດຄົ້ນບໍ່ແຮ່, ແຮງງານເດີນທະເລ ແລະ ອື່ນໆ.

78 ເຖິງແມ່ນວ່າກົດໝາຍແຮງງານລາວຈະໃຫ້ມີການຈ່າຍຄ່າລ່ວງເວລາໃຫ້ແກ່ແຮງງານທີ່ເຮັດວຽກເກີນກວ່າ 48 ຊົ່ວໂມງຕໍ່ອາທິດກໍ່ຕາມ. ນອກຈາກນີ້, ຊົ່ວໂມງທີ່ເກີນອອກໄປແມ່ນບໍ່ກາຍ 3 ຊົ່ວໂມງຕໍ່ມື້ ແລະ ບໍ່ແມ່ນໝົດທຸກມື້ໃນໜຶ່ງເດືອນ.

79 ສຳລັບຂໍ້ມູນປະຈຸບັນ ກ່ຽວກັບ ຜົນກະທົບຂອງການເຮັດວຽກເກີນເວລາ ຕໍ່ສຸຂະພາບຢູ່ອາເມລິກາ, ໃຫ້ເບິ່ງ Johnson ແລະ Lipscomb (2006). ອົງການ ILO ມີເອກະສານສົນທິສັນຍາສະບັບຕ່າງໆທີ່ກ່ຽວຂ້ອງກັບຊົ່ວໂມງ ແລະ ມື້ເຮັດວຽກ: ເຊັ່ນ ສົນທິ ສັນຍາ 1, 30, 31, 47, 49, 51, 57 ແລະ 61.

**ກ່ອງ 5.4: ບໍ່ມີການພັດທະນາ ຫຼື ການປັ່ງນວຽກ: ແຮງງານຜູ້ໜຶ່ງຢູ່ເມືອງໄກສອນພົມວິຫານ**

ຂ້ອຍມີອາຍຸ 32 ປີ. ຂ້ອຍເຂົ້າມາຢູ່ໃນເມືອງນີ້ໄດ້ປະມານ 7 ປີແລ້ວ. ຕັ້ງແຕ່ເຂົ້າມາຈົນຮອດປະຈຸບັນ ຂ້ອຍຍັງເຮັດວຽກຢູ່ກັບໂຮງເລື່ອຍ. ເຖິງວ່າຈະມີການພັກວຽກຫຼາຍຄັ້ງກໍ່ຕາມແຕ່ຂ້ອຍກໍ່ສາມາດໄດ້ວຽກເຮັດຄືນເປັນສ່ວນໃຫຍ່. ຂ້ອຍມາຢູ່ທີ່ນີ້ເພື່ອຊອກວຽກເຮັດຍ້ອນວ່າ ບ້ານຂອງຂ້ອຍຖືກເສຍຫາຍຈາກໄພທຳມະຊາດໃນປີນັ້ນ. ບໍ່ວ່າໃນກໍລະນີໃດ, ຊ່ອງທາງໃນການດຳລົງຊີວິດຢູ່ບ້ານຂອງຂ້ອຍແມ່ນມີໜ້ອຍຫຼາຍ ແລະ ຂ້ອຍກໍ່ມີຄອບຄົວໃຫຍ່. ດັ່ງນັ້ນ, ເຖິງວ່າການເຮັດວຽກຕອນທຳອິດຈະເປັນໜ້າເບື່ອກໍ່ຕາມ ແຕ່ຫຼັງຈາກນັ້ນຂ້ອຍກໍ່ໄດ້ຕັດສິນໃຈເຮັດວຽກຢູ່ທີ່ນີ້ຕໍ່ໄປ. ຂ້ອຍອາໄສຢູ່ເຮືອນພັກລວມທີ່ນາຍຈ້າງຈັດຫາໃຫ້, ຂ້ອຍມີແຕ່ຈ່າຍຄ່າອາຫານເທົ່ານັ້ນ.

ຫຼາຍປີຜ່ານໄປ ຕອນທີ່ຂ້ອຍອອກຈາກບ້ານມາ, ຂ້ອຍຖາມເຈົ້າຂອງໂຮງເລື່ອຍວ່າມີວຽກຕັດໄມ້ໃຫ້ຂ້ອຍເຮັດບໍ່ ແລະ ລາວກໍ່ໃຫ້ວຽກຂ້ອຍວຽກໜຶ່ງ. ນັ້ນແມ່ນການເລີ່ມເຂົ້າສູ່ຕະຫຼາດແຮງງານຢູ່ຕົວເມືອງຄັ້ງທຳອິດຂອງຂ້ອຍ. ຂ້ອຍບໍ່ເຄີຍມີສັນຍາແຮງງານ ແລະ ປະຈຸບັນກໍ່ບໍ່ມີ. ຂ້ອຍບໍ່ຮູ້ວ່າສັນຍາແຮງງານແມ່ນຫຍັງ ແລະ ຈະໄດ້ມາແນວໃດ ແລະ ຈະເຮັດຫຍັງກັບມັນ. ເວົ້າກົງໆ, ຂ້ອຍບໍ່ຮູ້ອ່ານ ຫຼື ຂຽນໜັງສືເລີຍ. ຂ້ອຍຮູ້ແຕ່ຕັດ, ຍົກ, ກອງ ແລະ ເກັບມັ້ງນໄມ້.

ເງິນເດືອນຂອງຂ້ອຍປະຈຸບັນແມ່ນ 400,000 ກີບ. ຜ່ານມາຂ້ອຍສາມາດຫາໄດ້ຫຼາຍກວ່າເງິນເດືອນ ເພາະວ່າປົກກະຕິແລ້ວ ບໍລິສັດສາມາດຫາໄມ້ມາໄດ້ຫຼາຍ ແລະ ແຮງງານສ່ວນຫຼາຍກໍ່ແມ່ນໄດ້ເຮັດວຽກເກີນເວລາ. ປະຈຸບັນ, ບໍລິສັດ ສ່ວນໃຫຍ່ແມ່ນໄດ້ໄມ້ໜ້ອຍລົງ ແລະ ບໍລິສັດນີ້ກໍ່ຄືກັນ. ຂ້ອຍໂຊກດີທີ່ຍັງຖືກຈ້າງຢູ່ກັບບໍລິສັດເຖິງແມ່ນວ່າຈະມີໄມ້ຫຼຸດລົງແລ້ວກໍ່ຕາມ. ຂ້ອຍບໍ່ແນ່ໃຈວ່າຂ້ອຍຈະຍັງໄດ້ຢູ່ທີ່ນີ້ໄປອີກດົນປານໃດ. ຄວາມກັງວົນໃຈຂອງຂ້ອຍແມ່ນມາຈາກການທີ່ໄດ້ລາຍຮັບຫຼຸດລົງ ໃນ 3-4 ປີຜ່ານມາ.

**ກ່ອງ 5.5: ຢູ່ທ້າຍອຸບມຸງແຫ່ງນີ້ມີແສງສະຫວ່າງຫຼືບໍ່? ທາງສຽງຂອງແມ່ຄ້າຢູ່ນະຄອນຫຼວງວຽງຈັນ.**

ຂ້ອຍມີ ອາຍຸ 48 ປີ. ປະຈຸບັນ, ຂ້ອຍມີຮ້ານຂາຍອາຫານນ້ອຍໆຢູ່ຕະຫຼາດຂົວດິນ. ຂ້ອຍມີລູກ 4 ຄົນ, ໃນນັ້ນ 3 ຄົນຮຽນຈົບວິຊາຊີບແລ້ວ ແຕ່ກໍ່ບໍ່ມີໃຜຊອກວຽກດີໄດ້ເທື່ອ. ພວກເຂົາເຈົ້າເຮັດວຽກເລັກໆນ້ອຍໆໃນໄລຍະສັ້ນໆ. ລູກຊາຍສອງຄົນທີ່ເຄີຍຮຽນບັນຊີ, ປະຈຸບັນກໍ່ເຮັດວຽກເປັນຄົນງານກໍ່ສ້າງ! ຂ້ອຍຕ້ອງໄດ້ເຮັດວຽກຫຼາຍຊົ່ວໂມງກວ່າເກົ່າ ເພື່ອໃຫ້ໄດ້ເງິນເພີ່ມມາລ້ຽງຄອບຄົວ ເພາະມີຄ່າໃຊ້ຈ່າຍຫຼາຍຂຶ້ນເພື່ອຊື້ອາຫານ, ເສື້ອຜ້າ ແລະ ຄ່າຮຽນຂອງລູກທີ່ຍັງນ້ອຍ. ການທີ່ຊາວໜຸ່ມຈະຫາວຽກໄດ້ນັ້ນບໍ່ແມ່ນເລື່ອງງ່າຍ. ດັ່ງນັ້ນ, ແມ່ຍິງເຖົ້າແກ່ຄືຂ້ອຍຕ້ອງໄດ້ເຮັດວຽກໜັກຫຼາຍກວ່າເກົ່າ.

ຂ້ອຍບໍ່ຮູ້ຈັກໃຜຫຼາຍທີ່ຈະຊ່ວຍໃຫ້ລູກຂ້ອຍໄດ້ວຽກດີ. ການທີ່ຂ້ອຍຕ້ອງໃຊ້ເວລາດົນຢູ່ກັບຮ້ານຂາຍເຄື່ອງເຮັດ ໃຫ້ຂ້ອຍບໍ່ມີເວລາເຂົ້າສັງຄົມ ແລະ ສ້າງສາຍພົວພັນໃນສັງຄົມ ຊຶ່ງເປັນສິ່ງຈຳເປັນເພື່ອຊ່ວຍໃຫ້ລູກຂອງຂ້ອຍໄດ້ວຽກດີ. ຂ້ອຍເກືອບຈະບໍ່ມີເວລາທີ່ຈະພົວພັນກັບລູກຂ້ອຍຄືກັນ. ບາງຄັ້ງ, ລູກຜູ້ນ້ອຍກໍ່ຊ່ວຍເຮັດວຽກຢູ່ຮ້ານຂາຍອາຫານ, ແຕ່ລາວກໍ່ບໍ່ໄດ້ເຮັດເລື້ອຍໆຍ້ອນວ່າລາວຕ້ອງໄປໂຮງຮຽນ.

ຮອດຍາມແລງມາ, ຂ້ອຍກໍ່ເມື່ອຍຫຼາຍແລ້ວບໍ່ສາມາດຈະເຮັດວຽກອື່ນອີກນອກຈາກທີ່ຈະນອນເທົ່ານັ້ນ.

**ກ່ອງ 5.6: ຊົ່ວໂມງເຮັດວຽກຫຼາຍກວ່າ ແລະ ໄດ້ຄ່າຈ້າງ 10,000 ກີບຕໍ່ມື້: ຈາກແຮງງານຜູ້ໜຶ່ງຢູ່ເມືອງໄກ ສອນພົມວິຫານ**

ຂ້ອຍມີອາຍຸ 16 ປີ, ກຳລັງເຮັດວຽກເປັນພະນັກງານຂາຍອາຫານຢູ່ຮ້ານໝີ່ແຫ່ງໜຶ່ງ. ຂ້ອຍເລີ່ມເຮັດວຽກຢູ່ໃນຮ້ານອາຫານແຫ່ງນີ້ມາໄດ້ສອງເດືອນແລ້ວ. ນາຍຈ້າງໃຫ້ທີ່ພັກ ແລະ ອາຫານແກ່ຂ້ອຍ. ໃນຕົວຈິງແລ້ວ, ຂ້ອຍພັກຢູ່ກັບຄອບຄົວຂອງນາຍຈ້າງ. ເງິນເດືອນຂອງຂ້ອຍແມ່ນ 300,000 ກີບ, ຊຶ່ງໃນນັ້ນຂ້ອຍກໍ່ໄດ້ ແບ່ງສ່ວນໜຶ່ງສົ່ງໄປບ້ານ. ພໍ່ແມ່ຂອງຂ້ອຍອາໄສຢູ່ໃນບ້ານຫ່າງໄກສອກຫຼີກຂອງແຂວງສະຫວັນນະເຂດ.

ຂ້ອຍລຸກແຕ່ເດິກພ້ອມກັບຄົນງານຄົນອື່ນໆເວລາປະມານ 3 ໂມງເຊົ້າ ເພື່ອກະກຽມວຽກສຳລັບມື້ນັ້ນ ເຊັ່ນ ໄປຊື້ຊີ້ນ, ຜັກສົດຢູ່ຕະຫຼາດ, ອະນາໄມສະຖານທີ່, ກະກຽມອາຫານ ແລະ ອື່ນໆ. ຮ້ານເປີດ 7 ໂມງເຊົ້າ ຊຶ່ງແມ່ນຕອນທີ່ລູກຄ້າເລີ່ມຫຼັ່ງໄຫຼເຂົ້າມາ. ຂ້ອຍເຮັດວຽກຈົນຮອດເວລາຮ້ານປິດ ຄືປະມານ 2 ຫຼື 3 ໂມງແລງ (ເຮັດວຽກ 12 ຊົ່ວໂມງບໍ່ມີຢຸດ). ຫຼັງຈາກປິດຮ້ານແລ້ວ ກໍ່ແມ່ນເວລາທີ່ຂ້ອຍສາມາດພັກຜ່ອນໄດ້. ວຽກຕອນແລງແມ່ນເລີ່ມຫຼັງຈາກນັ້ນ. ຂ້ອຍບໍ່ຮູ້ວ່າຂ້ອຍເຮັດວຽກຈັກຊົ່ວໂມງ, ຮູ້ແຕ່ວ່າເຮັດວຽກດົນໃນແຕ່ລະມື້. ຮ້ານໝີ່ເປີດທຸກມື້, ດັ່ງນັ້ນຈຶ່ງບໍ່ມີມື້ພັກສຳລັບຂ້ອຍ.

ຕາຕະລາງ 5.5: ອັດຕາສ່ວນຂອງແຮງານແບ່ງຕາມສະພາບແຮງງານເຈັບເປັນຍ້ອນເຮັດວຽກຫຼາຍຊົ່ວໂມງ ແລະ ສະພາບແວດລ້ອມການເຮັດວຽກບໍ່ດີ

| | ເຈັບເປັນຍ້ອນເຮັດວຽກໜັກ/ຫຼາຍຊົ່ວໂມງ | | ເຈັບເປັນຍ້ອນສະພາບແວດລ້ອມການເຮັດວຽກບໍ່ດີ | |
|---|---|---|---|---|
| ອຸດສາຫະກຳ | ແຮງງານຮັບຈ້າງ (%) | ປະກອບອາຊີບອິດສະຫຼະ (%) | ແຮງງານຮັບຈ້າງ (%) | ປະກອບອາຊີບອິດສະຫຼະ (%) |
| ການຕ່ຳແຜ່ນແພ ແລະ ຕັດຫຍິບ | 26.2 | 39.3 | 23.1 | 16.1 |
| ອຸດສາຫະກຳອື່ນໆ | 36 | 39.8 | 21.7 | 14.6 |
| ໂຮງແຮມຮ້ານອາຫານ | 19.8 | 0.0 | 10.7 | 0 |
| ການບໍລິການອື່ນໆ | 25 | 41.6 | 15.4 | 21.7 |
| ລວມຊາຍ-ຍິງ | 27.9 | 40.6 | 17.6 | 18.9 |
| ຊາຍ | 29.2 | 49.6 | 17.3 | 18.2 |
| ຍິງ | 26.8 | 36.5 | 17.9 | 19.2 |
| ແຮງງານຜູ້ຊາຍ | 37.3 | | 17.6 | |
| ແຮງງານແມ່ຍິງ | 32.0 | | 18.2 | |
| ແຮງງານທັງໝົດ | 34.0 | | 18.2 | |

***ແຫຼ່ງຂໍ້ມູນ:*** *ກະຊວງແຮງງານ ແລະ ສະຫວັດດີການສັງຄົມ (2008).*

ການລາພັກວຽກຂອງແຮງງານຫຼາຍກວ່າ 80% ແມ່ນຂຶ້ນກັບດຸນຍະພິນິດຂອງນາຍຈ້າງ. ຫຼັກຖານຈາກບຸກຄົນຊີ້ໃຫ້ເຫັນວ່າ ດຸນຍະພິນິດດັ່ງກ່າວອາດມີທັງຜົນດີ ແລະ ຜົນເສຍຕໍ່ຜົນປະໂຫຍດຂອງແຮງງານ. ນາຍຈ້າງທີ່ໃຈດີ ອາດໃຫ້ລູກນ້ອງລາພັກດົນຍ້ອນວ່າເຫັນໃຈ. ໃນທາງກົງກັນຂ້າມ, ນາຍຈ້າງຫຼາຍຄົນເຫັນວ່າການໃຫ້ລາພັກດັ່ງກ່າວ ແມ່ນໂອກາດໃນການປົດຄົນງານ ອອກຈາກວຽກຖ້າເຂົາເຈົ້າຫາກພົບວ່າ ມີຜູ້ມາແທນທີ່ມີປະສິດທິພາບ ແລະ ຄວາມເໝາະສົມກວ່າ. ສະຫຼຸບແລ້ວ, ມັນແມ່ນການກະທຳໂດຍອີງຕາມດຸນຍະພິນິດຂອງນາຍຈ້າງເອງຫຼາຍກວ່າຈະອີງໃສ່ກົດໝາຍ.

## ຄວາມປອດໄພໃນສະຖານທີ່ເຮັດວຽກ

ອຸບັດຕິເຫດເກີດຂຶ້ນໃນຂະແໜງອຸດສາຫະກຳຢູ່ລາວ ທີ່ສົ່ງຜົນໃຫ້ເກີດການບາດເຈັບ, ພິການ ແລະ ການເສຍຊີວິດຂອງແຮງງານນັ້ນແມ່ນເຫດການປົກກະຕິທີ່ມີຢູ່ເປັນປະຈຳ. ແຮງງານໃນກຸ່ມຕົວແທນການສຳຫຼວດ ປະມານ 1/3 ຈົ່ມວ່າກ່ຽວກັບການເຈັບເປັນເນື່ອງຈາກເຮັດວຽກໜັກ: ໃນນັ້ນ ມີແຮງງານເພດຍິງ 32% ແລະ ເພດຊາຍ 37% (ຕາຕະລາງ 5.5). ນອກຈາກນີ້, ຜູ້ທີ່ຈົ່ມວ່າຍ້ອນເຮັດວຽກຫຼາຍເກີນໄປ ສ່ວນຫຼາຍກໍ່ແມ່ນ ແຮງງານທີ່ປະກອບອາຊີບອິດສະຫຼະ. ສິ່ງດັ່ງກ່າວນີ້ຊີ້ໃຫ້ເຫັນວ່າ ແຮງງານທີ່ປະກອບອາຊີບອິດສະຫຼະເຫຼົ່ານັ້ນ ໄດ້ຜັກດັນໃຫ້ຕົນເອງ ເຮັດວຽກໜັກຂຶ້ນເພື່ອໃຫ້ໄດ້ລາຍຮັບເພີ່ມ ແລະ ສຸດທ້າຍກໍ່ເກີດລົ້ມເຈັບລົງ. ຄວາມຕ້ອງການລາຍຮັບເພີ່ມ ມີຄວາມສຳຄັນຫຼາຍກວ່າບໍ່ ຈຶ່ງເຮັດໃຫ້ເຂົາເຈົ້າບໍ່ຄຳນຶງເຖິງສຸຂະພາບຂອງຕົນເອງ?

ສະພາບແວດລ້ອມໃນການເຮັດວຽກກໍ່ມີຄວາມສຳຄັນເຊັ່ນດຽວກັນ: ຖ້າວ່າ ມາດຕະການຮັກສາຄວາມປອດໄພ ຢູ່ໃນບ່ອນເຮັດວຽກຫາກບໍ່ພຽງພໍ ກໍ່ຈະພາໃຫ້ເກີດອຸບັດຕິເຫດ ແລະ ຈະເຮັດໃຫ້ແຮງງານໄດ້ຮັບບາດເຈັບເຖິງແກ່ຊີວິດໄດ້. ບົດນີ້ ຈະໄດ້ປະເມີນຄຸນນະພາບຂອງສະພາບແວດລ້ອມ ຢູ່ບ່ອນເຮັດວຽກ ໂດຍຈະໄດ້ພິຈາລະນາເຖິງ ສະພາບອາກາດຫາຍໃຈ, ນ້ຳ (ຕ້ອງມີນ້ຳດື່ມສະອາດພຽງພໍ ແລະ ມີຫ້ອງນ້ຳ) ແລະ ພື້ນທີ່ (ຕ້ອງມີພື້ນທີ່ພຽງພໍ, ສະອາດ ແລະ ແຫ້ງ). ເຖິງແມ່ນວ່າ ຈຳນວນແຮງງານທີ່ເຈັບເປັນຍ້ອນສະພາບແວດລ້ອມບໍ່ດີ ບໍ່ສູງເທົ່າກັບ ຈຳນວນແຮງງານເຈັບເປັນຍ້ອນການເຮັດວຽກຫຼາຍຊົ່ວໂມງກໍ່ຕາມ, ແຕ່ໃນນັ້ນ ປະມານ ໜຶ່ງໃນຫ້າຂອງແຮງງານແມ່ຍິງ ແລະ ຜູ້ຊາຍ ແລະ ທັງຜູ້ທີ່ປະກອບອາຊີບອິດສະຫຼະ ແລະ ແຮງງານຮັບຈ້າງ ກໍ່ຍັງຈົ່ມວ່າ ກ່ຽວກັບບັນຫາສະພາບແວດລ້ອມໃນບ່ອນເຮັດວຽກບໍ່ດີ. ນອກຈາກນີ້, ມີພຽງປະມານເຄິ່ງໜຶ່ງຂອງແຮງງານທີ່ເຮັດວຽກກັບ ເຄື່ອງຈັກ, ສານເຄມີ ແລະ ເຄື່ອງໄຟຟ້າ ໄດ້ຮັບການປ້ອງກັນ ຈາກເຄື່ອງປ້ອງກັນ ແລະ ອື່ນໆ. ເພາະສະນັ້ນ, ຈຶ່ງມີຄວາມຈຳເປັນຮີບດ່ວນ ທີ່ຈະຕ້ອງຂະຫຍາຍມາດຕະຖານຄວາມປອດໄພອອກໄປໃຫ້ທົ່ວເຖິງໃນທຸກຂະແໜງການຍ່ອຍ.

## ຈິດສຳນຶກກ່ຽວກັບສິ່ງອຳນວຍຄວາມສະດວກຕ່າງໆ ທີ່ກ່ຽວຂ້ອງກັບວຽກງານ

ແຮງງານ ຮູ້ກ່ຽວກັບສະພາບທົ່ວໄປໃນບ່ອນເຮັດວຽກ, ໃນສັງຄົມ ແລະ ຮູ້ສິດຂອງຕົນເອງຫຼາຍປານໃດ? ຄຳຕອບຈາກການສຳພາດຜູ້ອອກແຮງງານຊີ້ໃຫ້ເຫັນວ່າ ເຂົາເຈົ້າຮູ້ໜ້ອຍດຽວ ກ່ຽວກັບຄຳຖາມຕ່າງໆ ທີ່ໄດ້ນຳໄປຖາມເຂົາເຈົ້າເຊັ່ນ: ຄຳຖາມກ່ຽວກັບອົງການຈັດຕັ້ງຂອງ ລັດຖະບານ ເຂົ້າໄປຊ່ວຍແກ້ໄຂບັນຫາຂອງແຮງງານ (ລວມເຖິງກະຊວງແຮງງານ ແລະ ສະຫວັດດີການສັງຄົມ), ກ່ຽວກັບອົງການຈັດຕັ້ງມະຫາຊົນ ເຊັ່ນ ສະຫະພັນກຳມະບານລາວ ຫຼື ສະຫະພັນແມ່ຍິງລາວ, ສູນຝຶກອົບຮົມ ຫຼື ອົງການຈັດຕັ້ງທີ່ບໍ່ສັງກັດລັດຖະບານ ທີ່ໃຫ້ການຊ່ວຍເຫຼືອ ແກ່ແຮງງານທຸກຍາກເປັນຕົ້ນ. ມີພຽງແຕ່ເລື່ອງສິ່ງອຳນວຍຄວາມສະດວກດ້ານສຸຂະພາບຢ່າງດຽວເທົ່ານັ້ນທີ່ແຮງງານຫຼາຍກວ່າເຄິ່ງໜຶ່ງຮູ້ (ຮູບສະແດງ 5.6, ກ່ອງ 5.7) ຊຶ່ງສະແດງອອກໃຫ້ເຫັນໄດ້ໃນບາງຂໍ້ມູນຂ່າວສານດັ່ງລຸ່ມນີ້.

ຂໍ້ມູນຫຼ້າສຸດຊີ້ໃຫ້ເຫັນວ່າ ສຸຂະພາບ ແມ່ນບັນຫາໜຶ່ງຂອງແຮງງານໃນຂະແໜງວຽກທີ່ມີລາຍຮັບຕ່ຳ ຢູ່ເຂດຕົວເມືອງ ແລະ ຈຳເປັນຕ້ອງສ້າງກົນໄກຕ່າງໆ ເພື່ອເຮັດໃຫ້ແຮງງານສາມາດຮັບປະກັນລາຍຈ່າຍດ້ານສຸຂະພາບໄດ້. ການປະກັນສຸຂະພາບລະດັບຈຸລະພາກ ທີ່ຈັດຕັ້ງປະຕິບັດກັນຫຼາຍ ໃນປະເທດກຳລັງພັດທະນາ ກໍ່ແມ່ນວິທີການໜຶ່ງ ທີ່ລາວເຮົາສາມາດນຳມາສຶກສາ ແລະ ໝູນໃຊ້ໃຫ້ແທດເໝາະກັບສະພາບຂອງລາວ (ເຊັ່ນ: ກອງທຶນຈານິບໍຣາ-ຢູ່ປະເທດເຄນຢາ, ສະມາຄົມແມ່ຍິງທີ່ປະກອບອາຊີບອິດສະຫຼະຢູ່ປະເທດອິນເດຍ). ລາຍລະອຽດກ່ຽວກັບວິທີການດັ່ງກ່າວສາມາດເບິ່ງໄດ້ໃນກ່ອງ 5.8.

## ***ສະຫຼຸບຫຍໍ້:***

1. *ແຮງງານຫຼາຍຄົນ, ບໍ່ວ່າຈະຢູ່ໃນຂະແໜງການທີ່ເອີ້ນກັນວ່າເປັນທາງການ (ເຊັ່ນ: ໂຮງງານຕັດຫຍິບ) ບໍ່ມີສັນຍາແຮງງານ. ສ່ວນແຮງງານຢູ່ນອກຂະແໜງການທີ່ບໍ່ເປັນທາງການ, ເກືອບວ່າບໍ່ມີໃຜເລີຍ ມີສັນຍາແຮງງານ. ດັ່ງນັ້ນ, ຈຶ່ງເຮັດໃຫ້ເຂົາເຈົ້າມີຄວາມສ່ຽງຕໍ່ການເສຍວຽກງານ ຫຼື ຕໍ່ຄວາມບໍ່ແນ່ນອນຂອງນາຍຈ້າງ. ການເຮັດວຽກດົນກວ່າເກນປົກກະຕິ ເຮັດໃຫ້ແຮງງານຂາດວຽກເປັນໄລຍະໆ. ສິ່ງດັ່ງກ່າວນີ້ ໄດ້ກາຍເປັນສາເຫດໃຫ້ເຂົາເຈົ້າບໍ່ມີວຽກເຮັດງານທຳ. ດັ່ງນັ້ນ, ຈຶ່ງເປັນເຫດຜົນສຳຄັນ ເພື່ອສ້າງຄວາມເຂັ້ມແຂງໃຫ້ແກ່ການກວດສອບເພື່ອບັງຄັບໃຊ້ກົດໝາຍໃນພາກສ່ວນຕະຫຼາດແຮງງານດັ່ງກ່າວ, ແລະ ສ້າງຕັ້ງກົນໄກຕ່າງໆຂຶ້ນມາເພື່ອເຮັດໃຫ້ແຮງງານສາມາດຮັບປະກັນລາຍຈ່າຍດ້ານສຸຂະພາບໄດ້ໃນເວລາເຈັບເປັນ (ເຊັ່ນ: ການປະກັນສັງຄົມຈຸລະພາກ).*

2. *ແຮງງານບາງຄົນເຈັບເປັນຍ້ອນເຮັດວຽກຫຼາຍຊົ່ວໂມງ, ສະພາບແວດລ້ອມບ່ອນເຮັດວຽກບໍ່ດີ ແລະ ຂາດສິ່ງຮັບປະກັນຄວາມປອດໄພໃນຂະແໜງອຸດສາຫະກຳ. ດັ່ງນັ້ນ, ບັນຫາດັ່ງກ່າວນີ້ໄດ້ກາຍມາເປັນໄພຄຸກຄາມຕໍ່ສຸຂະພາບ ແລະ ເປັນອັນຕະລາຍຕໍ່ວຽກເຮັດງານທຳຂອງເຂົາເຈົ້າ. ບັນຫານີ້ກໍ່ແມ່ນເຫດຜົນສຳຄັນອັນໜຶ່ງອີກທີ່ຮຽກຮ້ອງໃຫ້ຝ່າຍກ່ຽວຂ້ອງຕ້ອງເອົາໃຈໃສ່ສ້າງຄວາມເຂັ້ມແຂງໃຫ້ແກ່ລະບົບການກວດສອບ.*

3. *ການທີ່ມີແຮງງານຈຳນວນໜ້ອຍຢູ່ໃນຂະແໜງການນີ້ຮູ້ ແລະ ເຂົ້າໃຈໜ້ອຍກ່ຽວກັບນະໂຍບາຍຂອງລັດຖະບານ, ສິດທິຂອງເຂົາເຈົ້າຢູ່ບ່ອນເຮັດວຽກ, ສິ່ງຈຳເປັນສຳລັບບ່ອນເຮັດວຽກ ແລະ ລາຍລະອຽດຕ່າງໆ ມັນແມ່ນເຫດຜົນພຽງພໍແລ້ວທີ່ກະຊວງແຮງງານ ແລະ ສະຫວັດດີການສັງຄົມ ພ້ອມດ້ວຍອົງການຈັດຕັ້ງອ້ອມຂ້າງຂອງຕົນ ຈະຕ້ອງປະຕິບັດໜ້າທີ່ພັນທະຂອງຕົນໃຫ້ມີປະສິດທິພາບຫຼາຍຂຶ້ນ. ນອກຈາກນີ້, ກໍ່ຍັງເປັນເຫດຜົນໃຫ້ອຳນາດການປົກຄອງໃນລະດັບຕ່າງໆ ທີ່ເຮັດໜ້າທີ່ກ່ຽວກັບ ການສ້າງທັກສະເສີມຂະຫຍາຍວຽກງານ ກໍ່ສ້າງສີມືແຮງງານອອກໄປໃຫ້ກວ້າງຂວາງ ແລະ ທົ່ວເຖິງກວ່າເກົ່າ- ເບິ່ງບົດທີ 6 ສຳລັບບັນຫານີ້.*

## ລາຍຮັບ, ຄວາມບໍ່ແນ່ນອນຂອງລາຍຮັບ ແລະ ດ້ານອື່ນໆທີ່ກ່ຽວຂ້ອງ

### ລາຍຮັບ

ຜູ້ທີ່ປະກອບອາຊີບອິດສະຫຼະ ແມ່ນມີລາຍຮັບຈາກຜົນກຳໄລ. ໃນບັນດາແຮງງານຮັບຈ້າງ, ຫຼາຍຄົນ ແມ່ນໄດ້ຮັບຈາກສ່ວນແບ່ງຈາກຍອດຂາຍທີ່ເຂົາເຈົ້າເຮັດໄດ້ຕໍ່ມື້, ສ່ວນຄົນອື່ນໆ ແມ່ນໄດ້ຮັບເງິນເປັນຊົ່ວໂມງ ແລະ ຍັງມີກຸ່ມໜຶ່ງອີກໄດ້ຮັບເງິນເປັນລາຍອາທິດ, ລາຍເດືອນ ຫຼື ໄດ້ຮັບຈາກການປະສົມປະສານກັນຂອງຮູບແບບລາຍຮັບທີ່ກ່າວມາເທິງນັ້ນ. ແຮງງານຮັບຈ້າງສ່ວນໃຫຍ່ ບໍ່ໄດ້ຮັບເງິນໃນມື້ທີ່ບໍ່ໄດ້ເຮັດວຽກ ແລະ ຜູ້ທີ່ເຮັດວຽກໃຫ້ແກ່ຕົນເອງກໍ່ບໍ່ເປີດຮ້ານໃນມື້ທີ່ຕົນເອງບໍ່ເຮັດວຽກ.

**ກ່ອງ 5.7: ການປະກັນສັງຄົມຊ່ວຍແຮງງານໄດ້ ແຕ່ກໍ່ຍັງມີຂອບເຂດຈຳກັດ**

1. ນາງ ນ້ອຍ, ຊາວໜຸ່ມທີ່ເຮັດວຽກຢູ່ໂຮງງານຕັດຫຍິບແຫ່ງໜຶ່ງໄດ້ຍົກຍ້າຍມາຢູ່ວຽງຈັນແຕ່ 3 ປີກ່ອນ. ເງິນເດືອນສະເລ່ຍ ປະຈຸບັນຂອງລາວແມ່ນ 800,000 ກີບ (ລວມທັງເງິນທີ່ຈ່າຍຄ່າເຮັດວຽກລ່ວງເວລາ); ແຕ່ວ່າເງິນເດືອນດັ່ງກ່າວກໍ່ປ່ຽນແປງໄປຕາມແຕ່ລະເດືອນ ໂດຍຂຶ້ນກັບໜ້າວຽກທີ່ບໍລິສັດໄດ້ຮັບມາ. ເງິນເດືອນຕ່ຳສຸດທີ່ລາວໄດ້ຮັບແມ່ນ 400,000 ກີບ ໃນຍາມທີ່ບໍ່ມີວຽກເຮັດ ແລະ ສູງສຸດ ໜຶ່ງລ້ານກີບໃນຍາມທີ່ມີຄວາມຕ້ອງການເຄື່ອງຕັດຫຍິບຫຼາຍ. ລາວພໍໃຈກັບການທີ່ບໍລິສັດໃຫ້ທີ່ພັກ, ອາຫານ ແລະ ການຄ້ຳປະກັນທາງສັງຄົມ. ດັ່ງນັ້ນ, ໃນຍາມທີ່ທຸລະກິດດຳເນີນໄປບໍ່ໄດ້ດີ (ຊຶ່ງກໍ່ມີເລື້ອຍໆ) ລາວກໍ່ຕ້ອງໄດ້ສູ້ທົນກັບສະພາບການຂຶ້ນລົງຂອງລາຍຮັບ, ແຕ່ວ່າໃນເວລາເຈັບເປັນອົງການປະກັນສັງຄົມຈະຈ່າຍໃຫ້ລາວ.

   ນາຍຈ້າງຂອງລາວ ຊຸກຍູ້ໃຫ້ລາວເຂົ້າຮ່ວມໂຄງການປະກັນສັງຄົມ ແລະ ຈ່າຍໃຫ້ບາງສ່ວນ. ເຖິງຢ່າງໃດກໍ່ຕາມ, ນອກຈາກຂະແໜງອຸດສາຫະກຳຂະໜາດໃຫຍ່ແລ້ວ ການປະກັນສັງຄົມດັ່ງກ່າວ ແມ່ນຍັງມີໜ້ອຍ. ຂະໜາດວ່າຢູ່ໃນໂຮງງານອຸດສາຫະກຳຂະໜາດໃຫຍ່, ນາຍຈ້າງຍັງຄິດຢູ່ບໍ່ວ່າຈະຈ່າຍຄ່າປະກັນສັງຄົມໃຫ້ແກ່ແຮງງານທັງໝົດທີ່ຕົນເອງຈ້າງມານັ້ນ ຫຼື ບໍ່.

2. ທ້າວ ກາວີ ອາຍຸ 37 ປີ ເຮັດວຽກຢູ່ໂຮງງານເຟີນີເຈີແຫ່ງໜຶ່ງ, ເປັນສະມາຊິກຂອງໂຄງການປະກັນສຸຂະພາບ. ບໍ່ຄືແຕ່ກ່ອນ, ລາວບໍ່ຕ້ອງໄດ້ຈ່າຍຫຍັງເວລາຕ້ອງການຄວາມຊ່ວຍເຫຼືອດ້ານສຸຂະພາບ ແຕ່ກໍ່ຍັງມີຂໍ້ຈຳກັດຢູ່. ໂຄງການປະກັນສຸຂະພາບໃນປະຈຸບັນ, ໃນເວລາເຈັບເປັນລາວຕ້ອງໄປໂຮງໝໍເມືອງກ່ອນ ແລະ ຫຼັງຈາກໄດ້ຮັບອະນຸຍາດຈາກໂຮງໝໍເມືອງແລ້ວ ລາວຈຶ່ງສາມາດໄປພົບທ່ານໝໍຢູ່ເມືອງໃຫຍ່ຕ່າງໆໄດ້. ວິທີການແນວນີ້ໄດ້ສ້າງຄວາມຫຍຸ້ງຍາກໃຫ້ແກ່ລາວ ແລະ ທັງເປັນການໃຊ້ເວລາດົນ. ລາວສະເໜີວ່າອົງການປະກັນສັງຄົມ ຕ້ອງອະນຸຍາດໃຫ້ຜູ້ທີ່ເປັນສະມາຊິກສາມາດໄປພົບແພດຢູ່ບ່ອນໃດກໍ່ໄດ້ຕາມຄວາມຕ້ອງການຂອງເຂົາເຈົ້າ. ບໍ່ແມ່ນວ່າຈະໃຫ້ຄົນເຈັບໄປຫາໂຮງໝໍເມືອງກ່ອນ ແລ້ວຈຶ່ງສາມາດໄປຫາທ່ານໝໍທີ່ເຂົາເຈົ້າເລືອກ.

**ຮູບສະແດງ 5.6: ອັດຕາສ່ວນຂອງຜູ້ຕອບຄໍາຖາມຕ່າງໆກ່ຽວກັບສິ່ງອໍານວຍຄວາມສະດວກ ແລະ ສິດທິຂອງແຮງງານ**




***ແຫຼ່ງຂໍ້ມູນ:** ກະຊວງແຮງງານ ແລະ ສະຫວັດດີການສັງຄົມ (2008).*

ອີງຕາມຂໍ້ມູນກ່ຽວກັບລາຍຮັບຕໍ່ເດືອນເຫັນວ່າຜູ້ອອກແຮງງານກຸ່ມຕ່າງໆ ເຊັ່ນ ແຮງງານຜູ້ຊາຍທີ່ປະກອບອາຊີບອິດສະຫຼະ, ເຮັດວຽກຮັບຈ້າງ, ແຮງງານທີ່ບໍ່ໄດ້ໄປເຮັດວຽກຢູ່ຕ່າງປະເທດ, ແຮງງານທີ່ມີລະດັບການສຶກສາສູງກວ່າ, ແຮງງານອາຍຸໂສກວ່າ ແລະ ແຮງງານໃນຂະແໜງບໍລິການມີລາຍຮັບຫຼາຍກວ່າແຮງງານໃນກຸ່ມອື່ນໆ ທີ່ກົງກັນຂ້າມກັບກຸ່ມຂອງເຂົາເຈົ້າ (ຕາຕະລາງ 5.6). ຈາກຂໍ້ມູນຈະເຫັນໄດ້ຊັດເຈນວ່າ ແຮງງານເກືອບທັງໝົດ ແມ່ນມັກປະກອບອາຊີບອິດສະຫຼະ ແລະ ຕ້ອງການສີມືເພີ່ມຂຶ້ນ[80].

ລາຍຮັບເຫຼົ່ານີ້ ຈະຕ້ອງໄດ້ແບ່ງປັນກັບຄົນອື່ນ: ຢ່າງໜ້ອຍສຸດກໍ່ແມ່ນແບ່ງປັນໃຫ້ແກ່ພໍ່ແມ່ ແລະ ຍາດພີ່ນ້ອງຢູ່ທາງບ້ານ. ສິ່ງທີ່ຍັງບໍ່ທັນຮູ້ໄດ້ກໍ່ແມ່ນ ແຮງງານເຫຼົ່ານີ້ມີຫຼາຍປານໃດ ທີ່ເປັນຜູ້ຫາລ້ຽງຄອບຄົວແຕ່ຜູ້ດຽວ. ດັ່ງນັ້ນ, ຈຶ່ງເປັນໄປບໍ່ໄດ້ທີ່ຈະຄິດໄລ່ລາຍຮັບສະເລ່ຍຕໍ່ຫົວຄົນ ທີ່ມີຄວາມຈໍາເປັນສໍາລັບການວັດແທກມາດຕະຖານການດໍາລົງຊີວິດ. ໂດຍສະເລ່ຍແລ້ວ, ແຮງງານຮັບຈ້າງມີລາຍຮັບບໍ່ເກີນ 20,000-22,000 ກີບຕໍ່ມື້ ທີ່ເຂົາເຈົ້າເຮັດວຽກ; ເມື່ອນໍາເອົາລາຍຮັບນັ້ນມາແບ່ງປັນກັບຄົນອື່ນແລ້ວ ອາດຈະເຮັດໃຫ້ເຂົາເຈົ້າຢູ່ສູງກວ່າເສັ້ນຄວາມທຸກຍາກ ແຕ່ກໍ່ບໍ່ໄກກວ່ານັ້ນຫຼາຍ.

ລາຍຮັບຕໍ່ຊົ່ວໂມງ ແມ່ນວິທີການທີ່ດີກວ່າ ໃນການປະເມີນຂະໜາດຄວາມແຕກຕ່າງທາງດ້ານລາຍຮັບ ລະຫວ່າງ ກຸ່ມຕ່າງໆ ເພາະວ່າແຮງງານແຕ່ລະຄົນມີຈໍານວນຊົ່ວໂມງເຮັດວຽກແຕກຕ່າງກັນໃນແຕ່ລະມື້. ຖ້າແຮງງານສອງຄົນໄດ້ລາຍຮັບເທົ່າກັນ ແຕ່ຜູ້ໜຶ່ງ ພັດເຮັດວຽກຫຼາຍຊົ່ວໂມງກວ່າອີກຜູ້ໜຶ່ງ ກໍ່ໝາຍຄວາມວ່າຜູ້ທີ່ເຮັດວຽກໃຊ້ເວລາສັ້ນກວ່າມີລາຍຮັບຫຼາຍກວ່າ. ຖ້າປຽບທຽບກັບກຸ່ມທີ່ມີລາຍຮັບຕໍ່ເດືອນ ຈະເຫັນໄດ້ວ່າ ໃນກຸ່ມແຮງງານທີ່ມີລາຍຮັບເປັນຊົ່ວໂມງມີລາຍຮັບແຕກໂຕນກັນຫຼາຍກວ່າ (ຮູບສະແດງ 5.7). ຕົວຢ່າງ, ຄວາມແຕກຕ່າງລະຫວ່າງລາຍຮັບຕໍ່ເດືອນຂອງແຮງງານເພດຊາຍ ແລະ ຍິງ ແມ່ນມີປະມານ 23%. ສ່ວນຄວາມແຕກຕ່າງດ້ານລາຍຮັບຕໍ່ຊົ່ວໂມງ ແມ່ນມີປະມານ 30%. ດັ່ງນັ້ນ, ເຫດຜົນສ່ວນໜຶ່ງ ກໍ່ອາດແມ່ນຍ້ອນ ປະເພດຂອງວຽກທີ່ແຮງງານແມ່ຍິງ ແລະ ຜູ້ຊາຍເຮັດນັ້ນມີຄວາມແຕກຕ່າງກັນ.

ລາຍຮັບຂອງແຮງງານມີຄວາມແຕກຕ່າງກັນໄປຕາມເພດ, ສະພາບການໄປເຮັດວຽກຢູ່ຕ່າງປະເທດ, ລະດັບການສຶກສາ, ອາຍຸ ແລະ ຂະແໜງການ. ສະນັ້ນ, ຈຶ່ງມີຄວາມຈໍາເປັນຕ້ອງດໍາເນີນການກວດກາເບິ່ງວ່າ ການຈ້າງແຮງງານນັ້ນ ສອດຄ່ອງກັບມາດຕະຖານຂອງແຮງງານຫຼື ບໍ່. ຕົວຢ່າງ, ສົນທິສັນຍາ ສະບັບເລກທີ 100 ຂອງ ອົງການແຮງງານສາກົນ ສະເໜີໃຫ້ປະຕິບັດ ຄ່າຈ້າງເທົ່າທຽມກັນລະຫວ່າງຍິງ-ຊາຍ.

### ຄວາມບໍ່ແນ່ນອນດ້ານລາຍຮັບ ແລະ ດ້ານອື່ນໆ

ການຂຶ້ນໆລົງໆຂອງລາຍຮັບໃນເດືອນຕໍ່ເດືອນ ເປັນບັນຫາສໍາຄັນເພາະວ່າ ຈໍານວນແຮງງານເຮັດວຽກໃນຂະແໜງວຽກທີ່ມີລາຍຮັບຕໍ່າ ຫຼາຍກວ່າ 95% ມີລາຍຮັບມາຈາກແຫຼ່ງດຽວ. ເຊັ່ນດຽວກັບກໍລະນີຂອງການຫວ່າງງານທີ່ໄດ້ກ່າວເຖິງກ່ອນໜ້ານີ້, ການຂຶ້ນໆລົງໆຂອງລາຍຮັບ ເປັນສິ່ງກີດໜ່ວງຄວາມກ້າວໜ້າ ແລະ ຂະ

80 ລາຍຮັບຂອງຜູ້ທີ່ເຮັດວຽກໃຫ້ແກ່ຕົນເອງຕ້ອງໄດ້ຕີຄວາມໝາຍຢ່າງລະອຽດ, ເພາະວ່າຜົນການຄິດໄລ່ນີ້ອາດຈະອອກມາສູງເກີນໄປ. ບັນຫານີ້ກໍ່ຍ້ອນວ່າຜູ້ຕອບຄໍາຖາມບໍ່ສາມາດໄຈ້ແຍກລະຫວ່າງລາຍຮັບລວມ ແລະ ລາຍຮັບສຸດທິ ຫຼື ມີຄວາມຄິດແບບຄຸມເຄືອກ່ຽວກັບລາຍຮັບເຫຼົ່ານີ້.

**ຮູບສະແດງ 5.7: ລາຍຮັບຕໍ່ຊົ່ວໂມງຂອງແຮງງານຮັບຈ້າງ (ກີບ/ຊົ່ວໂມງ) ໃນແຕ່ລະກຸ່ມຍ່ອຍຕ່າງໆ**




***ແຫຼ່ງຂໍ້ມູນ:*** *ກະຊວງແຮງງານ ແລະ ສະຫວັດດີການສັງຄົມ (2008).*

**ຮູບສະແດງ 5.8: ອັດຕາສ່ວນຂອງແຮງງານທີ່ຮູ້ສຶກວ່າຕົນເອງມີລາຍຮັບໝັ້ນຄົງ ຕາມຄຸນລັກສະນະຂອງ ວຽກ**




***ແຫຼ່ງຂໍ້ມູນ:*** *ກະຊວງແຮງງານ ແລະ ສະຫວັດດີການສັງຄົມ (2008).*

ຫຍາຍໂຕຂອງແຮງງານ. ແຮງງານທີ່ປະກອບອາຊີບອິດສະຫຼະ, ແຮງງານຮັບຈ້າງ ແລະ ແຮງງານຢູ່ໃນຂະແໜງອຸດສາຫະກຳຍ່ອຍຕ່າງກໍ່ປະສົບກັບບັນຫານີ້. ສຳລັບແຮງງານໃນຂະແໜງການຍ່ອຍນັ້ນ, ກໍ່ຈະເຫັນໄດ້ວ່າ ລາຍຮັບຂອງແຮງງານຢູ່ໃນອຸດສາຫະກຳຕ່ຳແຜ່ນແພ ແລະ ຕັດຫຍິບ ມີຄວາມໝັ້ນຄົງໜ້ອຍກວ່າ. ສ່ວນລາຍຮັບຂອງແຮງງານທີ່ເຮັດວຽກໃນຮ້ານອາຫານ ແລະ ໂຮງແຮມມີຄວາມໝັ້ນຄົງສູງກວ່າ. ຖ້າຄິດໄລ່ລາຍຮັບຕາມຊົ່ວໂມງແລ້ວຈະເຫັນໄດ້ວ່າ ທັງສອງຂະແໜງການຍ່ອຍເຫຼົ່ານີ້ ໃຫ້ລາຍຮັບຕ່ຳກວ່າ. ຖ້າສຶກສາບັນຫາໃຫ້ເລິກເຊິ່ງ ກໍ່ຈະເຫັນວ່າ ແຮງງານເຮັດວຽກຢູ່ຮ້ານອາຫານ ແລະ ໂຮງແຮມ ເຖິງວ່າເຂົາເຈົ້າຈະໄດ້ຮັບຄ່າຈ້າງໜ້ອຍກວ່າກໍ່ຕາມ, ແຕ່ກໍ່ຮູ້ສຶກວ່າ ລາຍຮັບຂອງເຂົາເຈົ້າມີຄວາມໝັ້ນຄົງກວ່າ ຍ້ອນວ່າ ແຮງງານພວກນີ້ ສ່ວນຫຼາຍ ກໍ່ເປັນຍາດພີ່ນ້ອງຂອງນາຍຈ້າງ ແລະ ເຂົາເຈົ້າກໍ່ເຊື່ອວ່າ ນາຍຂອງເຂົາເຈົ້າ (ຫຼືພີ່ນ້ອງ) ຈະປົກປ້ອງເຂົາເຈົ້າ. ໃນທາງກົງກັນຂ້າມ, ຂະແໜງການຕ່ຳແຜ່ນແພ ແລະ ຕັດຫຍິບ ຊ້ຳພັດບໍ່ໃຫ້ການຄ້ຳປະກັນຄືແນວນັ້ນ. ນອກຈາກນີ້, ລາຍຮັບຂອງແຮງງານທີ່ປະກອບອາຊີບອິດສະຫຼະມີຄວາມໝັ້ນຄົງໜ້ອຍກວ່າ ຖ້າທຽບໃສ່ລາຍຮັບຂອງແຮງງານຮັບຈ້າງ ເພາະວ່າ ທຸລະກິດຂອງເຂົາເຈົ້າ ເປັນທຸລະກິດຂະໜາດນ້ອຍຫຼາຍ ແລະ ລາຍຮັບກໍ່ຂຶ້ນໂດຍກົງກັບຍອດຂາຍໃນແຕ່ລະມື້ ຊຶ່ງອີງຕາມລັກສະນະຂອງທຸລະກິດແລ້ວ ລາຍຮັບໃນແຕ່ລະມື້, ແຕ່ລະອາທິດ ຫຼື ແຕ່ລະເດືອນນັ້ນ ບໍ່ສາມາດຈະເທົ່າກັນໄດ້.

ນອກຈາກບັນຫາດ້ານລາຍຮັບແລ້ວ, ແຮງງານ ໄດ້ປະເຊີນກັບບັນຫາສະພາບຄວາມບໍ່ໝັ້ນຄົງດ້ານໃດອີກແດ່? ບັນຫາໜຶ່ງທີ່ພົ້ນເດັ່ນແມ່ນບັນຫາສຸຂະພາບ. ແຮງງານທີ່ເຮັດວຽກ ໃຫ້ແກ່ຕົນເອງ ແລະແຮງງານຮັບຈ້າງຫຼາຍກວ່າເຄິ່ງໜຶ່ງຕ່າງກໍ່ເວົ້າວ່າຖ້າວ່າ ຫຼື ໃນເວລາເຂົາເຈົ້າເຈັບເປັນ ເຂົາເຈົ້າຈະປະສົບກັບ ບັນຫາຄວາມຫຍຸ້ງຍາກຫຼາຍທີ່ສຸດ: ເຂົາເຈົ້າບໍ່ມີເງິນໃຊ້ຈ່າຍສຸກເສີນ ແລະ ນອກຈາກນີ້ແລ້ວ, ເຂົາເຈົ້າອາດຈະສູນເສຍທຸລະກິດ ຫຼື ການງານໄປກໍ່ເປັນໄດ້.

## ບາງເຫດຜົນກ່ຽວກັບການປ່ຽນແປງໃນດ້ານລາຍຮັບ

ແມ່ນຫຍັງທີ່ເປັນຕົວອະທິບາຍການປ່ຽນແປງໃນດ້ານລາຍຮັບ? ເພື່ອອະທິບາຍ ການປ່ຽນແປງດ້ານລາຍຮັບຂອງແຮງງານຮັບຈ້າງ ເພິ່ນໄດ້ນຳໃຊ້ ສົມຜົນຄວາມສຳພັນແບບຫຼາຍຕົວປ່ຽນ ມາຄິດໄລ່ໂດຍອີງໃສ່ທິດສະດີ ການສະສົມທຶນມະນຸດຍຸກດັ້ງເດີມ ທີ່ເອີ້ນກັນວ່າຄລາດຊິໂຄນ (Classical). ຜົນຮັບຈາກສົມຜົນດັ່ງກ່າວແມ່ນໃກ້ຄຽງກັບຕົວເລກທີ່ເກີດຂຶ້ນຈິງດີສົມຄວນ, ໂດຍລວມແລ້ວຈະເຫັນວ່າ ຕົວປ່ຽນ ສາມາດອະທິບາຍບໍ່ໄດ້ຫຼາຍ (ເອກະສານຊ້ອນທ້າຍ 5.3). ນອກຈາກນີ້, ສົມຜົນດັ່ງກ່າວຍັງຊີ້ໃຫ້ເຫັນວ່າການເພີ່ມຂຶ້ນໜຶ່ງຫົວໜ່ວຍໃນທຶນມະນຸດ ຈະເຮັດໃຫ້ລາຍຮັບເພີ່ມຂຶ້ນພຽງແຕ່ 2%. ນອກຈາກນັ້ນ, ສົມຜົນຍັງຢືນຢັນຄວາມໜ້າເຊື່ອຖືອີກວ່າ ຕະຫຼາດແຮງງານໃນຂະແໜງວຽກ ທີ່ມີລາຍຮັບຕ່ຳໃນຕົວເມືອງ ມີຂອບເຂດທີ່ຈະເຮັດໃຫ້ ລາຍຮັບປ່ຽນແປງໄປໄດ້ຂ້ອນຂ້າງຕ່ຳ.

**ຕາຕະລາງ 5.6: ລາຍຮັບຕໍ່ແຮງງານ-ສະເລ່ຍ**

| | ລາຍຮັບລວມຕໍ່ເດືອນ (ກີບ) |
|---|---|
| ຜູ້ປະກອບອາຊີບອິດສະຫຼະ (ຊາຍ) | 1,615,000 |
| ຜູ້ປະກອບອາຊີບອິດສະຫຼະ (ຍິງ) | 1,556,778 |
| ແຮງງານຮັບຈ້າງ (ຊາຍ) | 745,508 |
| ແຮງງານຮັບຈ້າງ (ຍິງ) | 601,281 |
| ຜູ້ປະກອບອາຊີບອິດສະຫຼະທັງໝົດ | 1,574,982 |
| ແຮງງານຮັບຈ້າງທັງໝົດ | 666,518 |
| ແຮງງານທີ່ເຄີຍໄປເຮັດວຽກຢູ່ຕ່າງປະເທດ | 690,472 |
| ແຮງງານທີ່ບໍ່ເຄີຍໄປເຮັດວຽກຢູ່ຕ່າງປະເທດ | 1,230,258 |
| ແຮງງານອາຍຸຮອດ 24 ປີ | 812,967 |
| ແຮງງານອາຍຸ > 24 ປີ | 1,288,680 |
| ແຮງງານທີ່ມີການສຶກສາຮອດ 5 ປີ | 999,671 |
| ແຮງງານທີ່ມີການສຶກສາຫຼາຍກວ່າ 5 ປີ | 1,168,064 |
| ແຮງງານຢູ່ຂະແໜງອຸດສາຫະກຳ | 996,901 |
| ແຮງງານຢູ່ຂະແໜງບໍລິການ | 1,242,986 |

***ແຫຼ່ງຂໍ້ມູນ:*** *ກະຊວງແຮງງານ ແລະ ສະຫວັດດີການສັງຄົມ (2008).*

## *ສະຫຼຸບຫຍໍ້:*

1. *ໂດຍສະເລ່ຍ, ແຮງງານຮັບຈ້າງມີລາຍຮັບປະມານ 20,000 ກີບຕໍ່ມື້. ລາຍຮັບຂອງແຮງງານທີ່ປະກອບອາຊີບອິດສະຫຼະ (ຜູ້ທີ່ໄດ້ຫຼາຍກວ່າ) ແລະ ແຮງງານຮັບຈ້າງມີຄວາມແຕກຕ່າງກັນຢ່າງຈະແຈ້ງ, ເຖິງແມ່ນວ່າ ລາຍຮັບຂອງແຮງງານທີ່ປະກອບອາຊີບອິດສະຫຼະ ມັກຈະຄາດຄະເນ ຫຼາຍເກີນໄປກໍ່ຕາມ. ເຖິງແມ່ນວ່າ ແຮງງານເຮັດວຽກໃຫ້ແກ່ຕົນເອງ ຈະມີຄວາມສ່ຽງດ້ານການຢຸດວຽກ ແລະ ດ້ານລາຍຮັບຫຼາຍກວ່າກໍ່ຕາມ ແຕ່ແຮງງານສ່ວນໃຫຍ່ ກໍ່ມັກການປະກອບອາຊີບອິດສະຫຼະຫຼາຍກວ່າ ຍ້ອນເຂົາເຈົ້າເຫັນວ່າມັນມີກຽດກວ່າ.*

2. *ແຮງງານປະສົບກັບບັນຫາຄວາມບໍ່ແນ່ນອນໃນດ້ານສຸຂະພາບ. ການປະກັນສຸຂະພາບຈຸລະພາກ ແມ່ນທາງເລືອກໜຶ່ງເພື່ອແກ້ໄຂບັນຫາດັ່ງກ່າວ.*

3. *ການມີສີມືດີກວ່າ, ມີອົງການຈັດຕັ້ງກວດສອບ ແລະ ມີລະບົບເພື່ອຍົກລະດັບສະມັດຕະພາບການຜະລິດ ແມ່ນສິ່ງຈຳເປັນເພື່ອເພີ່ມລາຍຮັບຂອງແຮງງານໃນຂະແໜງການນີ້.*

4. *ເພື່ອສ້າງຄວາມເຂັ້ມແຂງໃຫ້ແກ່ການເຮັດວຽກໃຫ້ແກ່ຕົນເອງ, ການນຳໃຊ້ວິທີການຕ່າງໆ ທີ່ສະເໜີໂດຍ ອົງການແຮງງານສາກົນ (ໃນຈຳນວນວິທີການອື່ນໆ) ອາດສາມາດຊ່ວຍໄດ້. ເກືອບທັງໝົດວິທີການ ກ່ຽວກັບ ການສົ່ງເສີມວຽກນອກລະດູ ແລະ ນອກຂະແໜງກະສິກຳ ແມ່ນມີລັກສະນະຄ້າຍຄືກັນກັບທີ່ໄດ້ສະເໜີມາແລ້ວໃນບົດທີ 4. ເນື້ອໃນຢູ່ໃນກ່ອງ 5.3 ເປັນການສະເໜີບາງວິທີການເພີ່ມຕື່ມ.*

**ກ່ອງ 5.8: ການປະກັນສັງຄົມຈຸລະພາກ**

ການປະກັນສັງຄົມຈຸລະພາກແມ່ນການປະກັນສັງຄົມທີ່ມີການເກັບຄ່າປະກັນ ແລະ ຍອດປະກັນຕ່ຳ. ມັນແມ່ນການດຳເນີນການທາງການເງິນເພື່ອປົກປ້ອງຄົນທີ່ມີລາຍໄດ້ຕ່ຳຈາກໄພຕ່າງໆ ໂດຍແລກປ່ຽນກັບການຈ່າຍຄ່າປະກັນຢ່າງເປັນປົກກະຕິ ຊຶ່ງເທົ່າກັບສັດສ່ວນໜຶ່ງຂອງຕົ້ນທຶນຂອງຄວາມສ່ຽງ ແລະ ຄວາມເປັນໄປໄດ້ທີ່ຄວາມສ່ຽງນັ້ນຈະເກີດຂຶ້ນ. ການປະກັນສັງຄົມຈຸລະພາກ ມີຄວາມໝາຍຄືກັນກັບການຈັດສັນທາງດ້ານການເງິນ ໂດຍອາໄສຊຸມຊົນເປັນຕົ້ນຕໍ, ຊຶ່ງລວມເຖິງກອງທຶນສຸຂະພາບຂອງຊຸມຊົນ, ອົງການດ້ານສຸຂະພາບທີ່ຮັບປະກັນຜົນປະໂຫຍດຮ່ວມກັນ, ການປະກັນສຸຂະພາບຊົນນະບົດ, ກອງທຶນຖົງຢາປະຈຳບ້ານ ແລະ ການມີສ່ວນຮ່ວມຂອງຊຸມຊົນໃນການຄຸ້ມຄອງຄ່າໃຊ້ຈ່າຍ. ລະບົບການເງິນຊຸມຊົນ ສ່ວນໃຫຍ່ໄດ້ເກີດຂຶ້ນໃນສະພາບທີ່ມີຂໍ້ຈຳກັດທາງດ້ານເສດຖະກິດ, ຄວາມບົກຜ່ອງດ້ານການຈັດຕັ້ງທາງການ ຫຼື ຂາດການບໍລິຫານຄຸ້ມຄອງທີ່ດີ. ລັກສະນະພື້ນຖານທີ່ຄ້າຍຄືກັນຂອງລະບົບປະກັນສັງຄົມທັງໝົດດັ່ງກ່າວ ແມ່ນການມີສ່ວນຮ່ວມຂອງຊຸມຊົນຢ່າງຕັ້ງໜ້າໃນການເກັບລາຍຮັບ, ສັງລວມລາຍຮັບ, ກະຈາຍຊັບພະຍາກອນທີ່ໄດ້ ແລະ ສະໜອງການບໍລິການຢ່າງເປັນປົກກະຕິ. ລະບົບປະກັນສັງຄົມຈຸລະພາກ ແມ່ນການນຳໃຊ້ການປະກັນ ເປັນເຄື່ອງມືທາງດ້ານເສດຖະກິດໃນລະດັບທ້ອງຖິ່ນຂອງສັງຄົມ (ແທນທີ່ຈະແມ່ນລະດັບຊາດ). ການຕັດສິນໃຈຕ່າງໆ ໃນການປະກັນສັງຄົມຈຸລະພາກ ແມ່ນສ້າງຂຶ້ນໃນແຕ່ລະໜ່ວຍງານ, ໃນລະດັບລັດຖະບານ, ບໍລິສັດ, ອົງການຈັດຕັ້ງທີ່ບໍ່ສັງກັດລັດຖະບານທີ່ໃຫ້ການສະໜັບສະໜູນການດຳເນີນງານ ແລະ ອື່ນໆ.

ໜ້າທີ່ຂອງການປະກັນ ແມ່ນຖືເອົາແນວຄິດຂອງການສັງລວມຄວາມສ່ຽງຄືກັນກັບໜ້າທີ່ຂອງການປະກັນຈຸລະພາກ ໂດຍບໍ່ໄດ້ຄຳນຶງເຖິງຂະໜາດນ້ອຍຂອງໜ່ວຍງານ ແລະ ກິດຈະກຳແຕ່ຢ່າງໃດ. ລະບົບປະກັນຈຸລະພາກ ໄດ້ເຊື່ອມໂຍງເອົາບັນດາໜ່ວຍງານນ້ອຍໆຫຼາຍຫົວໜ່ວຍເຂົ້າກັນເປັນໂຄງປະກອບໃຫຍ່, ສ້າງເຄືອຂ່າຍທີ່ສົ່ງເສີມທັງໜ້າທີ່ການປະກັນ (ໂດຍຜ່ານການສັງລວມຄວາມສ່ຽງໃນຂອບເຂດກວ້າງກວ່າ) ແລະ ໃຫ້ການສະໜັບສະໜູນໂຄງສ້າງຕ່າງໆເພື່ອປັບປຸງການບໍລິຫານຄຸ້ມຄອງ (ເຊັ່ນ: ການຝຶກອົບຮົມ, ແຫຼ່ງຂໍ້ມູນ, ສິ່ງອຳນວຍຄວາມສະດວກດ້ານການວິໄຈ ແລະ ອື່ນໆ). ກົນໄກດັ່ງກ່າວໄດ້ຮັບການຈັດຕັ້ງຂຶ້ນເປັນວິສາຫະກິດທີ່ມີອຳນາດບໍລິຫານຕົນເອງ, ສ່ວນໃຫຍ່ແມ່ນເປັນເອກະລາດຈາກການເງິນພາຍນອກ, ແລະ ເປົ້າໝາຍຕົ້ນຕໍຂອງວິສາຫະກິດ ແມ່ນການຮວບຮວມທັງຄວາມສ່ຽງ ແລະ ຊັບພະຍາກອນຂອງບັນດາກຸ່ມທັງໝົດ ເພື່ອໃຫ້ການປົກປ້ອງທາງດ້ານການເງິນແກ່ສະມາຊິກທຸກຄົນຕໍ່ຜົນກະທົບທາງດ້ານການເງິນທີ່ເປັນຜົນຈາກຄວາມສ່ຽງທີ່ກຳນົດໄວ້ຮ່ວມກັນ.

1. ການຊຳລະສະສາງແມ່ນມີຕົ້ນທຶນຕ່ຳ, ໂດຍເຫັນໄດ້ຈາກຄວາມພໍໃຈຈ່າຍຂອງສະມາຊິກ,

2. ລູກຄ້າແມ່ນມີມູນຄ່າທຶນສຸດທິຕ່ຳ, ແຕ່ກໍ່ບໍ່ຈຳເປັນວ່າທຸກຄົນຕ້ອງທຸກຍາກຫຼາຍຄືກັນໝົດ,

3. ຊຸມຊົນມີສ່ວນຮ່ວມໃນຂັ້ນຕອນສຳຄັນຕ່າງໆຂອງການດຳເນີນງານ,

4. ບົດບາດເຄືອຂ່າຍຂອງຫົວໜ່ວຍປະກັນຈຸລະພາກແມ່ນເພື່ອສົ່ງເສີມການຄຸ້ມຄອງຄວາມສ່ຽງຂອງສະມາຊິກໃນທຸກໆຫົວໜ່ວຍປະກັນຈຸລະພາກໃຫ້ໄດ້ດີກວ່າທີ່ແຕ່ລະໜ່ວຍສາມາດເຮັດໄດ້.

***ແຫຼ່ງຂໍ້ມູນ:*** *Churchill (2006), Alexander et al (2002) ໜ້າ. 143-150, Dror (1999) ໜ້າ. 71-97, Wikipedia (online encyclopaedia).*

# ແຮງງານເຄື່ອນຍ້າຍໄປເຮັດວຽກຢູ່ຕ່າງປະເທດ

## ດ້ານຈຳນວນ, ລາຍຮັບ, ສະຖານທີ່ ແລະ ຊ່ອງທາງການໄປ

### ຈຳນວນແຮງງານລາວທີ່ໄປເຮັດວຽກຢູ່ປະເທດໄທ

ການເຄື່ອນຍ້າຍໄປເຮັດວຽກ ຢູ່ຕ່າງປະເທດ ມີຜົນປະໂຫຍດທັງທາງດ້ານເສດຖະກິດ ແລະ ສັງຄົມ. ມັນຊ່ວຍເຮັດໃຫ້ຄວາມຕ້ອງການແຮງງານມີຄວາມດຸ່ນດ່ຽງກັບການສະໜອງ, ເກີດການຖ່າຍທອດສີມືຄວາມຮູ້, ຊ່ວຍໃຫ້ປະຊາຊົນຂຸດຄົ້ນເອົາຄວາມອາດສາມາດບົ່ມຊ້ອນຂອງຕົນເອງຂຶ້ນມາໃຊ້ໃຫ້ເກີດປະໂຫຍດ, ມີລາຍຮັບຫຼາຍຂຶ້ນ ແລະ ປິດຊ່ອງຫວ່າງທາງດ້ານວັດທະນະທຳ ແລະ ຊ່ອງຫວ່າງລະຫວ່າງຄົນ. ການໄປເຮັດວຽກຢູ່ຕ່າງປະເທດ ເປັນການເສີມສ້າງສັນຕິພາບອີກຢ່າງໜຶ່ງ. ແຮງງານລາວ ໄດ້ໄປມາຫາສູ່ເພື່ອຊອກວຽກເຮັດງານທຳ ແລະ ເພື່ອດຳເນີນທຸລະກິດຢູ່ໃນໄທມາເປັນເວລາຫຼາຍສິບປີແລ້ວ. ເຖິງຢ່າງໃດກໍ່ຕາມ, ການເດີນທາງໄປໄທ ສ່ວນໃຫຍ່ ແມ່ນບໍ່ເປັນທາງການໃນແນວຄວາມຄິດຄວາມເຂົ້າໃຈວ່າ ອຳນາດການປົກຄອງຂອງທັງສອງປະເທດບໍ່ໄດ້ຕິດຕາມຄຸ້ມຄອງການເຄື່ອນຍ້າຍແຮງງານດັ່ງກ່າວນີ້. ຜ່ານມາທັງສອງປະເທດ ຕ່າງກໍ່ເຫັນຄວາມສຳຄັນຂອງການເຄື່ອນຍ້າຍແຮງງານ ແລະ ປາດຖະໜາທີ່ຈະນຳເອົາເຫດການເຄື່ອນຍ້າຍແຮງງານນີ້ເຂົ້າສູ່ລະບົບ ແລະ ກອບນະໂຍບາຍຂອງຕົນ.

ມາຮອດປະຈຸບັນ ຍັງບໍ່ທັນມີການປະເມີນຕົວເລກທີ່ແທ້ຈິງ ຂອງຈຳນວນແຮງງານລາວ ທີ່ໄປເຮັດວຽກຢູ່ໄທ. ຕົວເລກຄາດຄະເນໂດຍອີງໃສ່ ຈຳນວນຄົນງານລາວ ທີ່ລົງທະບຽນກັບອຳນາດການປົກຄອງຂອງປະທເດໄທໃນປີ 2004 ແມ່ນມີຢູ່ 181,614 ຄົນ[81]. ນອກຈາກນີ້, ກໍ່ຍັງຄາດວ່າ ມີແຮງງານລາວ ຈຳນວນປະມານ

81 ແຮງງງາອອກຈາກ ລາວໂດຍຜິດກົດໝາຍ ແຕ່ວ່າຫຼາຍຄົນກໍ່ໄດ້ຈົດທະບຽນກັບອຳນາດການປົກຄອງຂອງປະເທດໄທ. ເຂົາເຈົ້າຍັງບໍ່ທັນໄດ້ຈົດທະບຽນຢູ່ລາວ. ດັ່ງນັ້ນ, ທາງດ້ານວິຊາການແລ້ວຈຶ່ງຖືວ່າຜິດກົດໝາຍ. ແຮງງານລາວທີ່ອອກໄປຖືກກົດໝາຍ ຕາມການເກັບກຳຂອງລາວ ແມ່ນມີພຽງແຕ່ປະມານ 8,000 ຄົນ.

80,000 ຄົນທີ່ບໍ່ໄດ້ລົງທະບຽນຢູ່ໄທໃນປີນັ້ນ[82] ຊຶ່ງສອງຕົວເລກດັ່ງກ່າວນີ້ ເມື່ອລວມກັນແລ້ວແມ່ນມີຫຼາຍກວ່າ 250,000 ຄົນ ໃນ ປີ 2004-2005. ອົງການແຮງງານສາກົນ ຫຼື ILO ແລະ ສະຖາບັນຄົ້ນຄວ້າເພື່ອການພັດທະນາຂອງໄທ (ຫຼື TDRI) ກໍ່ໄດ້ຄາດຄະເນຈຳນວນແຮງງານລາວຢູ່ໄທວ່າໃນເວລາໃດໜຶ່ງແມ່ນມີປະມານ 300,000 ຄົນ[83].

ຖ້າອີງຕາມຕົວເລກອັດຕາການເກີດ ແລະ ການຕາຍຂອງພົນລະເມືອງລາວ ທີ່ໄດ້ຈາກການສຳຫຼວດພົນລະເມືອງໃນ ປີ 1995 ແລະ 2005, ປະຊາກອນລາວໃນ ປີ 2005 ຄວນຈະມີປະມານ 5.89 ລ້ານຄົນ. ແຕ່ວ່າ, ຕົວເລກປະຊາກອນທີ່ນັບໄດ້ຈາກການສຳຫຼວດພົນລະເມືອງພັດມີແຕ່ 5.62 ລ້ານຄົນ. ສ່ວນທີ່ຕ່າງກັນຂອງສອງຕົວເລກດັ່ງກ່າວ, ຖ້າພິຈາລະນາດ້ວຍເຫດ ແລະ ຜົນແລ້ວ, ຈຳນວນປະຊາກອນທີ່ອອກໄປເຮັດວຽກຢູ່ຕ່າງປະເທດຄວນຈະມີປະມານ 264,327 ຄົນ. ຖ້າລົບອອກຈຳນວນແຮງງານຕ່າງດ້າວທີ່ເຂົ້າມາເຮັດວຽກຢູ່ລາວຕົວເລກດັ່ງກ່າວຈະຫຼຸດລົງເຫຼືອພຽງແຕ່ 242,327 ຄົນ, ຊຶ່ງໃນຈຳນວນນັ້ນຄາດວ່າ ແຮງງານປະມານ 90% (ຫຼື 218,094 ຄົນ) ແມ່ນເຮັດວຽກຢູ່ໄທໃນ ປີ 2005. ຕົວເລກນີ້ກວມເອົາປະມານ 8.4% ຂອງກຳລັງແຮງງານທັງໝົດ ຫຼື ເທົ່າກັບປະມານ 40% ຂອງແຮງງານທັງໝົດ ທີ່ຢູ່ນອກການຜະລິດກະສິກຳແບບຄົວເຮືອນ. ພວກເຮົາມີຄວາມເຊື່ອວ່າການຄິດໄລ່ນີ້ແມ່ນມີຄວາມໃກ້ຄຽງກັບຕົວຈິງຫຼາຍກວ່າທີ່ໄດ້ຄິດໄລ່ຈາກບ່ອນອື່ນ, ເພາະເປັນການຄິດໄລ່ທີ່ອີງໃສ່ຕົວເລກການສຳຫຼວດພົນລະເມືອງທີ່ເປັນຖານຂໍ້ມູນຄົບຖ້ວນສົມບູນທີ່ສຸດ.

ເຖິງຢ່າງໃດກໍ່ຕາມ, ການໄປເຮັດວຽກຢູ່ຕ່າງປະເທດໃນເວລາດຽວກັນນັ້ນກໍ່ມີທັງຜູ້ໄປໃໝ່ ແລະ ຜູ້ກັບມາ. ດັ່ງນັ້ນ, ຕົວເລກເໝາະສົມທີ່ສຸດແມ່ນຕົວເລກຄາດຄະເນ.

## ລາຍຮັບເງິນຕາຕ່າງປະເທດ

ເປັນການຍາກທີ່ຈະໄດ້ຕົວເລກເງິນຊັດເຈນທີ່ແຮງງານລາວສົ່ງກັບບ້ານ ເພາະວ່າ ການໂອນເງິນກັບບ້ານສ່ວນໃຫຍ່ ແມ່ນຜ່ານຊ່ອງທາງທີ່ບໍ່ເປັນທາງການ. ການຄິດໄລ່ທີ່ແຕກຕ່າງກັນ ໂດຍອີງໃສ່ການສຳຫຼວດ ຊີ້ໃຫ້ເຫັນວ່າ ໃນລະຫວ່າງປີ 2004-06 ນັ້ນ ເງິນທີ່ແຮງງານລາວຢູ່ໄທສົ່ງກັບບ້ານຕໍ່ປີ ມີປະມານ 150-190 ລ້ານໂດລາ[84]. ຈຳນວນເງິນດັ່ງກ່າວ ກວມເອົາປະມານ 7.1% ຂອງລວມຍອດຜະລິດຕະພັນພາຍໃນ, ເທົ່າກັບ 32% ຂອງການລົງທຶນໂດຍກົງຈາກຕ່າງປະເທດ ແລະ 21% ຂອງການສົ່ງອອກທັງໝົດໃນປີ 2006[85]. ຕົວເລກເຫຼົ່ານີ້ຊີ້ໃຫ້ເຫັນວ່າ 'ຜະລິດຕະພາບແຮງງານ' ໂດຍລວມຂອງແຮງງານລາວທີ່ໄປເຮັດວຽກຢູ່ຕ່າງປະເທດແມ່ນສູງກວ່າ ຜະລິດຕະພາບແຮງງານສະເລ່ຍຂອງລາວ ເນື່ອງຈາກເງິນປະຢັດ (ຫຼືເງິນທີ່ສົ່ງກັບບ້ານ) ເປັນພຽງສ່ວນໜຶ່ງຂອງຜະລິດຕະພາບແຮງງານເທົ່ານັ້ນ[86]. ເຖິງຢ່າງໃດກໍ່ຕາມ, ສັດສ່ວນໃຫຍ່ ຂອງຈຳນວນເງິນປະຢັດ ແມ່ນຢູ່ນອກລະບົບທະນາຄານ. ດັ່ງນັ້ນ, ຜົນປະໂຫຍດສ່ວນໃຫຍ່ຈາກແຮງງານໄປເຮັດວຽກຢູ່ຕ່າງປະເທດໃຫ້ແກ່ປະເທດຊາດຈຶ່ງມີຈຳກັດ. ເງິນດັ່ງກ່າວ ໄດ້ຖືກແລກປ່ຽນຢູ່ຕະຫຼາດ ອັດຕາແລກປ່ຽນນອກລະບົບ ຊຶ່ງຍິ່ງເຮັດໃຫ້ເກີດສະພາບ 'ການຫັນໄປນຳໃຊ້ເງິນໂດລາ' ແລະ 'ການຫັນໄປນຳໃຊ້ເງິນບາດ' ຫຼາຍຂຶ້ນໃນລະບົບເສດຖະກິດ.

ຕົວເລກເຫຼົ່ານີ້ເປັນຈຳນວນຫຼາຍ ຊຶ່ງເປັນການພິສູດໃຫ້ເຫັນເຫດຜົນທີ່ຄວນຈະນຳເອົາແຮງງານທີ່ໄປເຮັດວຽກຢູ່ຕ່າງປະເທດມາສັງລວມເຂົ້າໃນການວາງແຜນພັດທະນາຂອງປະເທດໃຫ້ຫຼາຍຂຶ້ນ.

## ເປັນຫຍັງຄົນຈຶ່ງຢາກອອກໄປເຮັດວຽກຢູ່ຕ່າງປະເທດ

ຄົນທີ່ອອກໄປເຮັດວຽກຕ່າງປະເທດສ່ວນໃຫຍ່ແມ່ນມາຈາກສະຖານທີ່ທຸກຍາກກວ່າໝູ່ຂອງສັງຄົມ; ເຂົາເຈົ້າຍັງໜຸ່ມນ້ອຍ (ອາຍຸຮອດ 25 ປີ), ພາກັນຫຼັ່ງໄຫຼມາຈາກເມືອງ ແລະ ແຂວງທີ່ຢູ່ໃກ້ກັບຊາຍແດນປະເທດໄທ, ແລະ ສ່ວນໃຫຍ່ແມ່ນຂ້າມໄປເຮັດວຽກຢູ່ໃນຂະແໜງກະສິກຳ ແລະ ກິດຈະກຳອື່ນໆທີ່ບໍ່ໃຊ້ສີມື ເຊັ່ນ: ວຽກບ້ານ, ວຽກກໍ່ສ້າງ ແລະ ວຽກໃນອຸດສາຫະກຳບັນເທີງ. ເຂົາເຈົ້າເດີນທາງໄປຫຼາຍແຂວງໃນປະເທດໄທເພື່ອຊອກຫາວຽກເຮັດງານທຳ. ຕາມການຄາດຄະເນວ່າແຮງງານເຫຼົ່ານີ້ປະມານ 53% ແມ່ນເພດຍິງ.[87].

ມີຫຼາຍປັດໄຈທີ່ເປັນແຮງຍູ້ໃຫ້ແຮງງານລາວ ເຄື່ອນຍ້າຍອອກໄປເຮັດວຽກຢູ່ຕ່າງປະເທດ. ໜຶ່ງໃນປັດໄຈເຫຼົ່ານັ້ນ ແມ່ນຍ້ອນທາງເລືອກໃນການທີ່ຈະໄດ້ເຮັດວຽກຢູ່ລາວ ຍັງມີໜ້ອຍ ເຮັດໃຫ້ແຮງງານຖືກຍູ້ໃຫ້ອອກໄປ ຊອກຫາວຽກເຮັດງານທຳຢູ່ບ່ອນອື່ນ. ສະພາບຄ່າແຮງງານສູງກວ່າຢູ່ປະເທດໄທ ຍັງເປັນປັດໄຈດຶງເອົາແຮງງານຈາກລາວ. ອັດຕາຄ່າແຮງງານທີ່ຄົນລາວ ໄດ້ຮັບຢູ່ໄທ (ປະມານ 150 ບາດຕໍ່ມື້) ແມ່ນຕ່ຳກວ່າອັດຕາທີ່ແຮງງານໄທໄດ້ຮັບໃນວຽກດຽວກັນ, ແຕ່ວ່າແຮງງານລາວ ກໍ່ຍັງໄດ້ຜົນປະໂຫຍດຢູ່ຍ້ອນວ່າ ຄ່າແຮງງານຢູ່ລາວ ຍັງຕ່ຳກວ່ານັ້ນອີກ ຄືປະມານ 10,000-20,000 ກີບຕໍ່ມື້. ຍັງມີຫຼາຍປັດໄຈດ້ານອື່ນອີກ ເຊັ່ນ: ການເຮັດວຽກຢູ່ໄທມີໂອກາດກ້າວໜ້າຕາມສາຍຕັ້ງ ແລະ ໂອກາດໃນການຍົກລະດັບສີມືແຮງງານ ແລະ ທັງມີລາຍຮັບຫຼາຍຂຶ້ນໃນໄລຍະຍາວ. ປະເທດໄທມີສັງຄົມທີ່ມີຄວາມຫຼາກຫຼາຍກວ່າ ແລະ ຮັ່ງມີກວ່າ ພ້ອມທັງ ມີຄວາມສາມາດ ທາງດ້ານເຕັກໂນໂລຊີສູງກວ່າ. ແຮງງານເຫຼົ່ານີ້ ຍັງສ້າງເຄືອຂ່າຍການຕິດຕໍ່ພົວພັນທາງດ້ານສັງຄົມຊຶ່ງຊ່ວຍໃຫ້ເພື່ອນ ແລະ ຍາດຕິພີ່ນ້ອງຂອງເຂົາເຈົ້າສາມາດຊອກຫາວຽກເຮັດງານທຳຢູ່ໄທໄດ້. ສຸດທ້າຍ, ຍັງມີປັດໄຈທີ່ເອີ້ນກັນວ່າ 'ໄປຕາມຂະບວນການ': ໝາຍຄວາມວ່າ ຖ້າວ່າມີບາງຄົນຢູ່ໃນບ້ານອອກໄປເຮັດວຽກ ແລ້ວປະສົບຜົນສຳເລັດກັບມາ ແລະ ມີລາຍຮັບຫຼາຍກວ່າທີ່ຫາໄດ້ຢູ່ທ້ອງຖິ່ນເດີມ ແລະ ໄດ້ຮຽນຮູ້ສິ່ງໃໝ່ໆກໍ່ເຮັດໃຫ້ຄົນອື່ນໆໃນບ້ານຢາກເຮັດຄືກັນ. ສິ່ງດັ່ງກ່າວນີ້ ແມ່ນເກີດຂຶ້ນໂດຍສະເພາະກັບ ໄວໜຸ່ມຜູ້ທີ່ຍັງຖືກປັ່ນຫົວຈາກລາຍການ ໂທລະທັດຂອງໄທ. ດັ່ງນັ້ນ, ຈຶ່ງບໍ່ເປັນເລື່ອງແປກໃຈເລີຍທີ່ວ່າ ມີບາງຄົນຂະໜາດໃຫ້ຄ່າຈ້າງຢູ່ລາວເທົ່າກັບທີ່ໄດ້ຢູ່ໄທກໍ່ຍັງອອກໄປເຮັດວຽກຢູ່ໄທຢູ່.

82 ການຄິດໄລ່ແມ່ນອີງໃສ່ຕົວເລກການຈັບກຸມຄົນງານຜິດກົດໝາຍ (Huguet and Punuing 2005).
83 ແຫຼ່ງຂໍ້ມູນ: ລັດຖະບານລາວ ແລະ ອົງການ UNDP (2006).
84 ແຫຼ່ງຂໍ້ມູນ: ລັດຖະບານລາວ ແລະ ອົງການ UNDP (2006); ຈັນທະວິສຸກ (2006); ອົງການ ILO (2007)
85 ອີງໃສ່ການຄິດໄລ່ພາຍໃນສະຖາບັນຄົ້ນຄວ້າເສດຖະກິດແຫ່ງຊາດ (ເບິ່ງ NERI 2008).
86 ເວົ້າງ່າຍໆ, ຜະລິດຕະພາບແຮງງານ = ກຳໄລຂອງນາຍຈ້າງທີ່ໄດ້ຈາກການເຮັດວຽກຂອງແຮງງານ + ການໃຊ້ຈ່າຍຂອງແຮງງານ + ເງິນປະຢັດຂອງແຮງງານ.
87 ແຫຼ່ງຂໍ້ມູນ: ລັດຖະບານລາວ ແລະ ອົງການ UNDP (2006).

**ກ່ອງ 5.9: ຈະຈົດທະບຽນແຮງງານ ຫຼື ບໍ່ຈົດທະບຽນ**

ມີລະບຽບການໃນການໃຫ້ຈົດທະບຽນແຮງງານຢູ່ທັງສອງປະເທດລາວ ແລະ ໄທ. ແຕ່ລະບຽບການດັ່ງກ່າວຍັງມີການປະສານສົມທົບກັນໜ້ອຍ.

**ການຈົດທະບຽນແຮງງານລາວຢູ່ປະເທດໄທ**

ແຮງງານຫຼາຍຄົນໄປໄທຢ່າງບໍ່ຖືກກົດໝາຍ (ໝາຍວ່າເຂົາເຈົ້າບໍ່ໄດ້ຈົດທະບຽນຢູ່ລາວເຮົາ), ແຕ່ວ່າເຂົາເຈົ້າພັດຈົດທະບຽນຢູ່ປະເທດໄທວ່າເປັນ 'ແຮງງານຕ່າງດ້າວ'. ແຕ່ໃນນັ້ນກໍ່ຍັງມີຫຼາຍບັນຫາ ຊຶ່ງບັນຫາຕົ້ນຕໍແມ່ນມີດັ່ງລຸ່ມນີ້:

ກ. ຄ່າຈົດທະບຽນແພງ ແລະ ໃຊ້ເວລາດົນ, ຊຶ່ງເປັນການບໍ່ຊຸກຍູ້ໃຫ້ນາຍຈ້າງ ແລະ ແຮງງານມາລົງທະ ບຽນໂດຍສະເພາະແຮງງານຕາມລະດູການ,
ຂ. ການຕັດສິນໃຈວ່າຈະຈົດທະບຽນ ຫຼື ບໍ່ນັ້ນ ສ່ວນໃຫຍ່ແມ່ນຂຶ້ນກັບນາຍຈ້າງຜູ້ທີ່ບໍ່ຄ່ອຍມີຄວາມກະຕືລືລົ້ນຢາກເຮັດປານໃດ ເພາະວ່າບໍ່ໄດ້ຜົນປະໂຫຍດຫຍັງນຳ,
ຄ. ຂັ້ນຕອນການຈົດທະບຽນຊັກຊ້າ ແລະ ຫຍຸ້ງຍາກສັບສົນຫຼາຍ, ໂດຍຜູ້ທີ່ມາຈົດທະບຽນ ອາດຕ້ອງໄດ້ໄປຫ້ອງການທະບຽນຢ່າງໜ້ອຍ 5 ຄັ້ງ, ແລະ
ງ. ນະໂຍບາຍການຈົດທະບຽນ ແລະ ລະບຽບການຕ່າງໆມີການປ່ຽນແປງຢູ່ເລື້ອຍໆ; ເຮັດໃຫ້ທັງນາຍຈ້າງ ແລະ ແຮງງານມີຄວາມສັບສົນກ່ຽວກັບບັນດາເງື່ອນໄຂຕ່າງໆ.

**ບັນຫາກ່ຽວກັບການຈົດທະບຽນແຮງງານຢູ່ລາວ**

ເຖິງແມ່ນວ່າແຮງງານທີ່ເປັນເປົ້າໝາຍຫຼາຍຄົນຢູ່ລາວສະແດງຄວາມສົນໃຈຢາກໄປເຮັດວຽກຢູ່ໄທ, ແຕ່ກໍ່ມີແຮງງານພຽງຈຳນວນໜ້ອຍເທົ່ານັ້ນ ທີ່ໄປໂດຍຜ່ານຕາມຂະບວນການຖືກກົດໝາຍຢູ່ລາວ. ອີງຕາມບົດບັນທຶກຄວາມເຂົ້າໃຈ ທີ່ເຊັນລະຫວ່າງລັດຖະບານສອງປະເທດ ກ່ຽວກັບ ການອຳນວຍຄວາມສະດວກໃຫ້ແກ່ການເຄື່ອນຍ້າຍແຮງງານ, ມີນາຍຈ້າງໄທໄດ້ສະເໜີຄວາມຕ້ອງການແຮງງານຈຳນວນ 62,094 ຄົນຈາກລາວ ລະຫວ່າງ ປີ 2006 ແລະ 2007, ແຕ່ວ່າມີພຽງແຕ່ 8,897 ຄົນຖືກສົ່ງໄປ. ບັນຫາຕົ້ນຕໍແມ່ນ:

ກ. ຂັ້ນຕອນການລະດົມແຮງງານໃຊ້ເວລາດົນ: ໃຊ້ເວລາໂດຍສະເລ່ຍຮອດ 3 ເດືອນທີ່ຈະລະດົມແຮງງານໂດຍຜ່ານຊ່ອງທາງທີ່ເປັນທາງການ ຖ້າທຽບໃສ່ຂັ້ນຕອນບໍ່ເປັນທາງການແມ່ນຕໍ່າກວ່າໜຶ່ງອາທິດ,
ຂ. ຄ່າຈົດທະບຽນແພງເຖິງ 15,000-25,000 ບາດ ຊຶ່ງເທົ່າກັບລາຍຮັບ 5-6 ເດືອນ, ທຽບໃສ່ຊ່ອງທາງບໍ່ເປັນທາງການມີແຕ່ປະມານ 2,000 -3,000 ບາດ (ຫຼື 60-80 ໂດລາ) [Huguet ແລະ Punpuing (2005), Martin (2007)],
ຄ. ສັນຍາມີຄວາມເຂັ້ມງວດ (ໃນດ້ານເວລາ, ສະຖານທີ່ເຮັດວຽກ, ປະເພດຂອງວຽກ ແລະ ອື່ນໆ) ຊຶ່ງອາດບໍ່ສອດຄ່ອງກັບແຮງງານ [Chantavanich, Vungsiriphisal, ແລະ Laodumrongchai 2007; TDRI 2007]
ງ. ໂກຕ້າຂອງຈຳນວນແຮງງານທີ່ຈະຖືກຈ້າງງານໃນແຕ່ລະຂະແໜງການ, ແລະ
ຈ. ກິດຈະກຳຕ່າງໆ ເຊັ່ນ ວຽກໃນຂະແໜງກະສິກຳຕາມລາຍການບູລິມະສິດຂອງລັດຖະບານແມ່ນມີໜ້ອຍ, ສ່ວນແຮງງານລາວພັດຢາກໄປເຮັດວຽກທີ່ບໍ່ມີສີມືຫຼາຍກວ່າ (ເຊັ່ນ: ກະສິກຳຕາມລະດູການ, ວຽກບ້ານ ແລະ ອື່ນໆ).

***ແຫຼ່ງຂໍ້ມູນ:*** *ສະຖາບັນຄົ້ນຄວ້າເສດຖະກິດແຫ່ງຊາດ (2008).*

## ຮູບແບບຂອງການເຄື່ອນຍ້າຍແຮງງານໄປເຮັດວຽກຢູ່ຕ່າງປະເທດ

ມີຫຼາຍວິທີໃຫ້ແຮງງານເລືອກໃຊ້ໃນການຂ້າມຊາຍແດນ. ໂດຍລວມແລ້ວແຮງງານເຫຼົ່ານີ້ສາມາດຈັດແບ່ງອອກເປັນສອງກຸ່ມຄື: ແບບເປັນທາງການ ແລະ ແບບບໍ່ເປັນທາງການ.

### ການເຄື່ອນຍ້າຍແບບເປັນທາງການ

ຢູ່ ສປປ ລາວ, ແຮງງານຕ້ອງໄດ້ຈົດທະບຽນກັບໜຶ່ງໃນ 9 ບໍລິສັດຈັດຫາງານທີ່ຮັບຮູ້ຈາກລັດຖະບານ; ສອງບໍລິສັດ ແມ່ນເປັນຂອງລັດ ແລະ ສ່ວນທີ່ເຫຼືອແມ່ນບໍລິສັດຂອງເອກະຊົນ. ບໍລິສັດເຫຼົ່ານີ້ໄດ້ກະຈາຍຢູ່ຕາມເມືອງທີ່ແຮງງານມັກເຄື່ອນຍ້າຍອອກໄປເຮັດວຽກຢູ່ຕ່າງປະເທດ. ແຮງງານທີ່ຈົດທະບຽນກັບບໍລິສັດເຫຼົ່ານີ້ແມ່ນແຮງງານທີ່ມີສີມືໃນລະດັບໃດໜຶ່ງ (ເພາະວ່າລັດຖະບານບໍ່ສົ່ງເສີມໃຫ້ມີແຮງງານທີ່ບໍ່ມີສີມື ຫຼື ມີທັກສະຕໍ່າອອກໄປເຮັດວຽກຢູ່ນອກປະເທດ) ແລະ ມີແຜນການຈະຢູ່ຕ່າງປະເທດດົນ. ແຮງງານຈຳນວນໜຶ່ງເລືອກໃຊ້ຊ່ອງທາງແບບທາງການດັ່ງກ່າວຍ້ອນເຫດຜົນທີ່ກ່າວໄວ້ໃນກ່ອງ 5.9. ນອກຈາກນີ້, ມີພຽງແຮງງານສ່ວນໜຶ່ງເທົ່ານັ້ນທີ່ຈະໄປເຮັດວຽກດົນ; ຫຼາຍຄົນໄປເພື່ອເກັບກ່ຽວພືດຜົນ, ເຮັດວຽກກະສິກຳຕາມລະດູການ ຫຼື ເຮັດວຽກກໍ່ສ້າງໃນໄລຍະເວລາຂ້ອນຂ້າງສັ້ນ, ຊຶ່ງຊ່ອງການໄປແບບເປັນທາງການອາດບໍ່ເກີດການຊຸກຍູ້ ຫຼື ບໍ່ເໝາະສົມກັບເຂົາເຈົ້າ. ໃນເມື່ອມີການເຊັນບົດບັນທຶກຄວາມເຂົ້າໃຈລະຫວ່າງລາວ ແລະ ໄທ ເພື່ອຮັບຮູ້ວ່າແຮງງານເຄື່ອນຍ້າຍບໍ່ແມ່ນແຮງງານທີ່ໄປເຮັດວຽກໃນລັກສະນະດຽວກັນ, *ລະບຽບການທີ່ມີຢູ່ໃນປະຈະບັນ ຍັງບໍ່ທັນຕອບສະໜອງໄດ້ ເຖິງຄວາມຕ້ອງການຂອງແຮງງານທີ່ຢາກອອກໄປເຮັດວຽກຢູ່ປະເທດໄທໃນໄລຍະສັ້ນ.*

### ການເຄື່ອນຍ້າຍແຮງງານຕາມຊ່ອງທາງທີ່ບໍ່ເປັນທາງການ

1. ວິທີງ່າຍທີ່ສຸດທີ່ຈະຜ່ານຊາຍແດນແມ່ນໃຊ້ 'ປຶ້ມຜ່ານແດນ', ຊຶ່ງອະນຸຍາດໃຫ້ຄົນລາວສາມາດເຂົ້າປະເທດໄທໄດ້ 3 ມື້ຕໍ່ເທື່ອໜຶ່ງ. ປຶ້ມຜ່ານແດນບໍ່ອະນຸຍາດໃຫ້ເຮັດວຽກ, ແຕ່ວ່າແນວໃດກໍ່ຕາມແຮງງານເປົ້າໝາຍ ກໍ່ຢູ່ ແລະ ເຮັດວຽກ.

2. ເຄືອຂ່າຍຈັດຫາຄົນງານ ແບບບໍ່ຖືກກົດໝາຍ ບາງແຫ່ງທີ່ມີການຈັດຕັ້ງດີ ແມ່ນດຳເນີນການຢູ່ທັງສອງເບື້ອງ ຂອງສອງ

ປະເທດ. 'ນາຍໜ້າຈັດຫາແຮງງານ' ຈະຕິດຕໍ່ກັບຜູ້ທີ່ຕ້ອງການໄປເຮັດວຽກຢູ່ລາວ. ໃນເວລາດຽວກັນ, ນາຍໜ້າຢູ່ໄທກໍ່ຈະຕິດຕໍ່ກັບນາຍຈ້າງ ທີ່ເປັນເປົ້າໝາຍ ໂດຍໃຫ້ລາຍລະອຽດກ່ຽວກັບຜູ້ທີ່ຈະນຳມາເຮັດວຽກໃຫ້. ຈາກນັ້ນ, ນາຍໜ້າຢູ່ລາວຈະລັກລອບນຳເອົາແຮງງານຂ້າມໄປປະເທດໄທ ແລະ ສົ່ງຕໍ່ໃຫ້ແກ່ ນາຍໜ້າຢູ່ໄທ ຊຶ່ງຈະເປັນຜູ້ນຳສົ່ງໃຫ້ນາຍຈ້າງອີກຕໍ່ໜຶ່ງ. ນາຍຈ້າງຈະຈ່າຍຄ່າທຳນຽມໃຫ້ແກ່ນາຍໜ້າ ເປັນຄ່າການບໍລິການ ແລະ ສຸດທ້າຍແລ້ວ ກໍ່ແມ່ນຫັກເອົາເງິນເດືອນຂອງແຮງງານ ມາເປັນຄ່າບໍລິການ ໃຫ້ແກ່ນາຍໜ້າ. ນາຍໜ້າທີ່ຈັດຫາແຮງງານ ຈະໃຫ້ແຮງງານ ເປັນຜູ້ຈ່າຍຄ່າເດີນທາງເອົາເອງ. ເຄືອຂ່າຍຈັດຫາແຮງງານຜິດກົດໝາຍດັ່ງກ່າວໄດ້ດຳເນີນການຢູ່ຕາມເຂດຊາຍແດນມາດົນແລ້ວ, ແຕ່ວ່າຄວາມນິຍົມໃນການໃຊ້ບໍລິການຂອງເຂົາເຈົ້າ ໄດ້ຫຼຸດລົງໃນປະຈຸບັນໂດຍມີເຄືອຂ່າຍທາງດ້ານສັງຄົມເຂົ້າມາແທນທີ່[88].

3. ເມື່ອມີແຮງງານລາວໄປເຮັດວຽກຢູ່ປະເທດໄທຫຼາຍຂຶ້ນ ກໍ່ຈະເຮັດໃຫ້ເຄືອຂ່າຍການພົວພັນທາງດ້ານສັງຄົມຂອງຜູ້ທີ່ໄປເຮັດວຽກເຫຼົ່ານັ້ນມີຄວາມເຂັ້ມແຂງຂຶ້ນ. ໝູ່ເພື່ອນ ຫຼື ພີ່ນ້ອງທີ່ໄປເຮັດວຽກກ່ອນເປັນແຫຼ່ງຂໍ້ມູນສຳຄັນໃຫ້ແກ່ຜູ້ທີ່ຕ້ອງການໄປເຮັດວຽກຢູ່ໄທ. ໃນບາງກໍລະນີ, ເຂົາເຈົ້າກໍ່ຍັງປະພຶດໂຕຄືກັນກັບນາຍໜ້າຈັດຫາແຮງງານໃຫ້ແກ່ນາຍຈ້າງຂອງເຂົາເຈົ້າເອງ ຫຼື ເປັນນາຍໜ້າດ້ວຍຕົນເອງ. ການບໍລິການທາງດ້ານໂທລະຄົມມະນາຄົມໂດຍສະເພາະການໃຊ້ໂທລະສັບໄດ້ອຳນວຍຄວາມສະດວກໃຫ້ແກ່ການຕິດຕໍ່ພົວພັນລະຫວ່າງຝ່າຍຕ່າງໆ.

ບັນຫາຕົ້ນຕໍຂອງການໄປເຮັດວຽກແບບບໍ່ເປັນທາງການກໍ່ຄືຄວາມບໍ່ມີລະບຽບການ: ແຮງງານອາດຈະຖືກຫຼອກລວງ, ອາດມີການນຳໃຊ້ແຮງງານເດັກ, ການຄ້າມະນຸດ (ໂດຍສະເພາະແມ່ຍິງ), ມີການບັງຄັບໃຊ້ແຮງງານ ແລະ ອື່ນໆ. ສະຫຼຸບແລ້ວ, ການໄປເຮັດວຽກແບບບໍ່ເປັນທາງການ ແມ່ນມີຕົ້ນທຶນ ທາງດ້ານມະນຸດສູງ (ກ່ອງ 5.10). ຄຳຖາມ: ເປັນໄປໄດ້ບໍ່ທີ່ຈະເຮັດໃຫ້ຊ່ອງທາງແບບບໍ່ເປັນທາງການທີ່ມີຢູ່ທັງໝົດດັ່ງກ່າວຖືກຕ້ອງຕາມກົດໝາຍ? ການຮັບຮູ້ດັ່ງກ່າວອາດຈະຊ່ວຍໃຫ້ສາມາດນຳເອົາບັນດາຕົວແທນເຫຼົ່ານີ້ກັບເຂົ້າມາຢູ່ໃນກອບກົດໝາຍໄດ້ ແລະ ຈະເຮັດໃຫ້ສາມາດວາງລະບຽບການຄຸ້ມຄອງການເຮັດວຽກຂອງເຂົາເຈົ້າໄດ້.

## *ສະຫຼຸບຫຍໍ້:*

1. *ແຮງງານຈາກລາວທີ່ໄປເຮັດວຽກຢູ່ໄທກວມເອົາປະມານ 8% ຂອງກຳລັງແຮງງານທັງໝົດ ແລະ ຈຳນວນເງິນທີ່ເຂົາເຈົ້າສົ່ງກັບບ້ານຄາດວ່າ ເທົ່າກັບປະມານ 7% ຂອງລວມຍອດຜະລິດຕະພັນພາຍໃນຂອງລາວ. ຈຳນວນເງິນເຫຼົ່ານີ້ ພຽງຢ່າງດຽວກໍ່ຖືວ່າສົມເຫດສົມຜົນແລ້ວທີ່ຄວນຈະວາງນະໂຍບາຍໃຫ້ຄວາມສຳຄັນຫຼາຍຂຶ້ນໃນການອຳນວຍຄວາມສະດວກໃຫ້ແກ່ການເຮັດວຽກ ແລະ ການກັບຄືນມາຂອງແຮງງານເຫຼົ່ານັ້ນ.*

2. *ອັດຕາສ່ວນໃຫຍ່ຂອງແຮງງານເຫຼົ່ານີ້ ຖືວ່າເປັນແຮງງານທີ່ 'ບໍ່ເປັນທາງການ' (ຊຶ່ງເອີ້ນວ່າຜິດກົດໝາຍ) ຕາມລະບຽບການຂອງລາວ. ແຕ່ວ່າສິ່ງດັ່ງກ່າວນີ້ ບໍ່ແມ່ນສະພາບບັນຫາທີ່ເກີດຂຶ້ນຢູ່ປະເທດໄທ ເພາະວ່າແຮງງານເຫຼົ່ານັ້ນເກືອບເຄິ່ງໜຶ່ງ ແມ່ນໄດ້ຮັບການຈົດທະບຽນຖືກຕ້ອງຢູ່ໄທ ຈຶ່ງເວົ້າໄດ້ວ່າຫຼັກການ ແລະ ລະບຽບການຕ່າງໆຂອງສອງປະເທດຍັງບໍ່ມີຄວາມສອດຄ່ອງກັນ, ຈຶ່ງມີຄວາມຈຳເປັນທີ່ຈະຕ້ອງທົບທວນຄືນບັນດາລະບຽບ ແລະ ຫຼັກການທີ່ກ່ຽວຂ້ອງກັບແຮງງານອອກຈາກລາວໄປເຮັດວຽກຢູ່ຕ່າງປະເທດ.*

3. *ເຖິງແມ່ນວ່າຈະມີຄວາມສ່ຽງຫຼາຍປານໃດກໍ່ຕາມ, ແຮງງານ ແລະ ຄອບຄົວຂອງເຂົາເຈົ້າມັກຈະໃຊ້ຊ່ອງທາງທີ່ຜິດກົດໝາຍເພື່ອເດີນທາງອອກຈາກລາວໄປເຮັດວຽກຢູ່ປະເທດໄທ, ທັງນີ້ກໍ່ຍ້ອນວ່າ ຊ່ອງທາງທີ່ຜິດກົດໝາຍນີ້ແມ່ນໄວກວ່າ, ຖືກກວ່າ ແລະງ່າຍກວ່າ. ຈະເປັນໄປໄດ້ບໍ່ຖ້າຈະຫັນເອົາບາງຊ່ອງທາງ (ແລະ ບັນດານາຍໜ້າຈັດຫາງານ) ທີ່ຜິດກົດໝາຍເຫຼົ່ານັ້ນໃຫ້ຖືກກົດໝາຍເພື່ອຮັບຮູ້ຄວາມເປັນຈິງກ່ຽວກັບການເຄື່ອນຍ້າຍແຮງງານຂອງເຂົາເຈົ້າ ແລະ ນຳເອົາບັນດານາຍໜ້າເຫຼົ່ານັ້ນເຂົ້າມາຢູ່ພາຍໃຕ້ກອບຂອງລະບຽບກົດໝາຍໄດ້?*

**ກ່ອງ 5.10: ສ່ຽງອອກໄປເຮັດວຽກ...ແລະ ຕ້ອງຈ່າຍຕາມລາຄາ**

ທ້າວ ລິນ (ບ້ານ ດົງຍາງ, ແຂວງຈຳປາສັກ) ແມ່ນພໍ່ຂອງລູກ 5 ຄົນ. ລູກສາວຄົນໜຶ່ງຂອງລາວ, ນາງ ສູຕັນ, ໄດ້ອອກໄປເຮັດວຽກຢູ່ໄທຕອນນາງອາຍຸໄດ້ 14 ປີ ໂດຍບໍ່ບອກໃຜໃນຄອບຄົວໃຫ້ຮູ້. ສອງເດືອນຕໍ່ມາ, ທ້າວ ລິນ ໄດ້ພົບລູກສາວຂອງຕົນຈາກການຊ່ວຍເຫຼືອຂອງພີ່ນ້ອງທີ່ເຮັດວຽກກັບກຳລັງປ້ອງກັນປະເທດ ແລະ ບັງຄັບໃຫ້ນາງກັບມາ. ຫຼັງຈາກໜຶ່ງອາທິດທີ່ ນາງ ສູຕັນ ກັບມາ, ລາວກໍ່ໜີອອກໄປໄທອີກ ໂດຍໄປກັບແຮງງານຄົນອື່ນໆໃນບ້ານ. ສາມເດືອນຕໍ່ມາ, ນາງ ສູຕັນ ໄດ້ຍ້າຍຈາກບ່ອນທີ່ລາວເຄີຍເຮັດວຽກໃນເບື້ອງຕົ້ນ ແລະ ຫຼັງຈາກນັ້ນກໍ່ບໍ່ມີໃຜຮູ້ຂ່າວຄາວຂອງລາວເລີຍຈົນຮອດປະຈຸບັນເກືອບຈະໄດ້ 10 ປີ ແລ້ວ. ໃນໄລຍະປະຈຸບັນນີ້, ລູກສາວອີກຄົນໜຶ່ງຂອງ ທ້າວ ລິນ, ນາງ ຂັນ, ກໍ່ອອກໄປເຮັດວຽກຢູ່ໄທອີກໂດຍບໍ່ບອກໃຜໃນຄອບຄົວ. ແຕ່ວ່າບໍ່ຄືກັບ ນາງ ສູຕັນ, ນາງ ຂັນ ຍັງຕິດຕໍ່ກັບຄອບຄົວເປັນປົກກະຕິ. ປະຈຸບັນລາວກັບຄືນມາລາວຫຼັງຈາກໄປຢູ່ໄທມາໄດ້ 3 ປີ. ເມື່ອເຫັນນາງ ຂັນ ກັບມາ, ລູກສາວອີກຄົນໜຶ່ງຂອງ ທ້າວ ລິນ ກໍ່ວາງແຜນຈະໄປໄທອີກ.

ການອອກໄປເຮັດຢູ່ໄທເຮັດໃຫ້ມີໂອກາດ ແຕ່ກໍ່ມີຄວາມສ່ຽງຫຼາຍ.

***ແຫຼ່ງຂໍ້ມູນ:*** *ສະຖາບັນຄົ້ນຄວ້າເສດຖະກິດແຫ່ງຊາດ (2008).*

# ສະພາບແວດລ້ອມຂອງການເຮັດວຽກ

## ສະຖານະພາບທາງດ້ານກົດໝາຍ ແລະ ການປົກປ້ອງແຮງງານ

ເຖິງແມ່ນວ່າລັດຖະບານໄທໄດ້ອອກ ກົດໝາຍ ວ່າດ້ວຍການປົກປ້ອງແຮງງານໃນ ປີ 1998 (ສຳລັບແຮງງານໄທ ແລະ ແຮງງານຕ່າງດ້າວ) ເພື່ອຮັບປະກັນມາດຕະຖານໃນການເຮັດວຽກ, ມີການປົກປ້ອງແຮງງານພຽງພໍໃນເວລາກຳລັງເຮັດວຽກທີ່ມີອັນຕະລາຍ, ຫ້າມການລະເມີດທາງເພດ ແລະ ອື່ນໆ, ແຕ່ກົດໝາຍດັ່ງກ່າວກໍ່ບໍ່ໄດ້ຮັບການບັງຄັບໃຊ້ຢ່າງມີປະສິດທິພາບຕໍ່ແຮງງານຕ່າງດ້າວ[89].

88 ອ້າງອີງ: Curran, Garip, Chung ແລະ Tangchonlatip (2003).
89 ເບິ່ງ, Huguet ແລະ Punpuing (2005).

**ກ່ອງ 5.11: ບໍ່ເຮັດຕາມສັນຍາ, ເຮັດວຽກຫຼາຍຊົ່ວໂມງ ແລະ ອັນຕະລາຍຕ່າງໆ**

**ກໍລະນີທີ 1:** ທ້າວ ສົວ (ບ້ານນາອ້ອຍໜູ, ແຂວງບໍລິຄໍາໄຊ) ໄປເຮັດວຽກຢູ່ໄທເພື່ອຢາກໄດ້ລາຍຮັບເພີ່ມ. ລາຍຮັບຂອງລາວຢູ່ບ້ານນີ້ແມ່ນຕໍ່າ ແລະ ບໍ່ເປັນປົກກະຕິ. ທ້າວສົມ, ຊຶ່ງອ້າງວ່າເປັນໝູ່ກັບພໍ່, ສັນຍາກັບ ທ້າວສົວ ວ່າຈະໄດ້ວຽກໃນໂຮງງານຢູ່ບາງກອກ ແລະ ໄດ້ເງິນເດືອນ 7,000 ບາດ. ແຕ່ວ່າ ເມື່ອລາວໄປຮອດໄທແລ້ວ ລາວຖືກສົ່ງໄປແຂວງສຸພັນບູລີ ແລະ ໃຫ້ເຮັດວຽກປູກຕົ້ນໄມ້. ທ້າວ ສົວ ຕ້ອງໄດ້ເຮັດວຽກແຕ່ 7 ໂມງເຊົ້າຮອດ 2 ໂມງເຊົ້າຂອງມື້ຕໍ່ມາ ໂດຍມີເວລາພັກກິນອາຫານທ່ຽງພຽງແຕ່ສອງສາມນາທີ (ໝາຍຄວາມວ່າ ເຮັດວຽກຫຼາຍກວ່າ 16 ຊົ່ວໂມງຕໍ່ມື້!), ແລະ ໄດ້ຮັບຄ່າຈ້າງພຽງແຕ່ 3,000 ບາດຕໍ່ເດືອນ.

**ກໍລະນີທີ 2:** ທ້າວໃບ (ບ້ານແກ້ງເກຍ, ເມືອງບາຈຽງຈະເລີນສຸກ ແຂວງຈໍາປາສັກ) ໄປເຮັດວຽກຢູ່ບາງກອກ ໂດຍໄດ້ຮັບສັນຍາວ່າຈະໄດ້ວຽກຢູ່ຮ້ານອາຫານທີ່ມີຄ່າຈ້າງ 5,000 ບາດຕໍ່ເດືອນ (ໂດຍຈະຈ່າຍທຸກໆສອງອາທິດ). ແຕ່ວ່າ, ສອງອາທິດຜ່ານໄປ, ທ້າວ ໃບ ກໍ່ຍັງບໍ່ໄດ້ຮັບເງິນເດືອນຈາກນາຍຈ້າງ. ທ້າວ ໃບ ໄປຖາມກັບນາຍຈ້າງຫຼາຍຄັ້ງ ແຕ່ກໍ່ບໍ່ໄດ້ເງິນ. ກົງກັນຂ້າມ, ນາຍຈ້າງໄດ້ແຈ້ງຕໍາຫຼວດອີກສີ່ອາທິດຕໍ່ມາໃຫ້ມາຈັບ ທ້າວ ໃບ. ໂຊກດີທີ່ ທ້າວ ໃບ ໜີມາໄດ້.

***ແຫຼ່ງຂໍ້ມູນ:*** *ສະຖາບັນຄົ້ນຄວ້າເສດຖະກິດແຫ່ງຊາດ (2008).*

ນອກຈາກນີ້, ໃນຈໍານວນແຮງງານລາວທີ່ໄດ້ຈົດທະບຽນກັບເຈົ້າໜ້າທີ່ຂອງໄທ ກໍ່ຍັງບໍ່ຮູ້ຮອດສິດທິຂອງຕົນເອງ. ດັ່ງນັ້ນ, ໃນທາງປະຕິບັດແລ້ວ ການປົກປ້ອງຈາກກົດໝາຍເກືອບຈະບໍ່ມີຄວາມໝາຍຫຍັງເລີຍສໍາລັບເຂົາເຈົ້າ. ນອກນັ້ນ, ແຮງງານຕ່າງປະເທດ ຍັງບໍ່ໄດ້ຮັບອະນຸຍາດໃຫ້ຕັ້ງສະຫະພັນແຮງງານຂອງຕົນຂຶ້ນຢູ່ໄທເຖິງແມ່ນວ່າ ເຂົາເຈົ້າຈະໄດ້ຮັບອະນຸຍາດ ໃຫ້ເຂົ້າຮ່ວມກັບສະຫະພັນທີ່ມີຢູ່ແລ້ວກໍ່ຕາມ. ເຖິງຢ່າງໃດກໍ່ຕາມ, ແຮງງານລາວທີ່ເຂົ້າຮ່ວມກັບສະຫະພາບແຮງງານຢູ່ໄທ ຖ້າມີ ກໍ່ແມ່ນມີໜ້ອຍຫຼາຍ ເພາະນາຍຈ້າງ ຕ້ອງການແຮງງານທີ່ບໍ່ໄດ້ເຂົ້າຮ່ວມກັບສະຫະພັນໃດຫຼາຍກວ່າ. ແຮງງານລາວເອງກໍ່ເກີດຄວາມລັ່ງເລໃຈ ທີ່ຈະເຂົ້າຮ່ວມກັບສະຫະພັນ ຫຼື ສະມາຄົມໃດໜຶ່ງ ຍ້ອນມີຄວາມຮູ້ສຶກດ້ອຍກວ່າຄົນໄທຈຶ່ງບໍ່ຢາກພົວພັນກັບເຂົາເຈົ້າ. ນອກຈາກນີ້ ກໍ່ຍັງພົບເຫັນວ່າແຮງງານໃນຂະແໜງກະສິກໍາ, ການປະມົງ, ອຸດສາຫະກໍາປຸງແຕ່ງ ແລະ ຂະແໜງການອື່ນໆຈໍາເປັນຕ້ອງຍອມມອບໃບຈົດທະບຽນແຮງງານຂອງຕົນ ໃຫ້ແກ່ນາຍຈ້າງເກັບມ້ຽນ ຊຶ່ງໃນທາງປະຕິບັດແລ້ວແມ່ນເຮັດໃຫ້ເຂົາເຈົ້າຕ້ອງຂຶ້ນຢູ່ກັບຄວາມກະລຸນາຂອງນາຍຈ້າງ[90]. ເຖິງແມ່ນວ່າ ຜູ້ອອກແຮງງານທີ່ບໍ່ມີໃບອະນຸຍາດເຮັດວຽກ ຈະບໍ່ໄດ້ຮັບການປົກປ້ອງຈາກການໃຊ້ແຮງງານ ໃນສະພາບແວດລ້ອມການເຮັດວຽກບໍ່ດີກໍ່ຕາມ, ແຕ່ສໍາລັບເຂົາເຈົ້າແລ້ວເບິ່ງບໍ່ເຫັນເລີຍວ່າຄວາມສ່ຽງຕໍ່ການຖືກຈັບກຸມ ແລະ ຖືກສົ່ງກັບປະເທດ ຈະເປັນເລື່ອງສໍາຄັນພໍທີ່ຈະສ້າງຄວາມລໍາຄານໃຫ້ແກ່ຕົນເອງ (ກ່ອງ 5.11)[91].

## ສະພາບການເຮັດວຽກ

ແຮງງານທີ່ໄປເຮັດວຽກຢູ່ປະເທດໄທ ມັກຖືກວາງຕໍາແໜ່ງໃຫ້ເຮັດວຽກຢູ່ບ່ອນອັນຕະລາຍ, ຫຍຸ້ງຍາກ ແລະ ເປື້ອນເປິ ເຊັ່ນ: ວຽກກ່ຽວກັບການປະມົງ, ເປັນຄົນຮັບໃຊ້ທີ່ບໍ່ມີລະບຽບການຄຸ້ມຄອງ, ວຽກງານກໍ່ສ້າງ, ເປັນແຮງງານໃນສະຖານທີ່ປູກຝັງ ແລະ ອື່ນໆ. ແຮງງານແມ່ຍິງຫຼາຍຄົນ ໄດ້ວຽກຢູ່ຮ້ານອາຫານ, ສະຖານບັນເທີງຕອນຄໍ່າ, ໂຮງອາບອົບນວດ ແລະ ວຽກອື່ນໆທີ່ຄ້າຍຄືກັນນີ້[92]. ມັນບໍ່ແມ່ນເລື່ອງແປກທີ່ຈະເຫັນແຮງງານທີ່ໄປເຮັດວຽກຢູ່ປະເທດໄທໄດ້ 'ວຽກເສດເຫຼືອ' ເຮັດ ເຊັ່ນ: ວຽກທີ່ຄົນໄທບໍ່ເຮັດ ຫຼື ຖ້າຄົນໄທເຮັດກໍ່ເຮັດໃນຄ່າຈ້າງທີ່ສູງຫຼາຍ[93]. ສະພາບແວດລ້ອມການເຮັດວຽກກໍ່ເຊັ່ນດຽວກັນ ແມ່ນບໍ່ຖືກສຸຂະອະນາໄມ, ໂດຍສະເພາະຢູ່ຕາມໂຮງງານນ້ອຍ ທີ່ຫ້ອງເຮັດວຽກມີອາກາດຮ້ອນອົບເອົ້າ ແລະ ເປື້ອນເປິ ແລະ ມີແສງສະຫວ່າງໜ້ອຍ[94].

ຈໍານວນຊົ່ວໂມງເຮັດວຽກສູງສຸດຕາມກົດໝາຍຂອງປະເທດໄທແມ່ນ 8 ຊົ່ວໂມງຕໍ່ໜຶ່ງມື້ ແລະ 48 ຊົ່ວໂມງຕໍ່ ໜຶ່ງອາທິດ. ສໍາລັບແຮງງານທີ່ເຮັດວຽກເພີ່ມຈະມີເງິນລ່ວງເວລາໃຫ້. ມີຫຼາຍກໍລະນີທີ່ແຮງງານເຮັດວຽກເກີນ 48 ຊົ່ວໂມງໃນໜຶ່ງອາທິດ ແລະ ສ່ວນໃຫຍ່ເຂົາເຈົ້າບໍ່ໄດ້ຮັບເງິນລ່ວງເວລາ[95]. ໃນກໍລະນີຂອງວຽກຄົນຮັບໃຊ້ນັ້ນແຮງງານສ່ວນໃຫຍ່ແມ່ນແມ່ຍິງ, ໄລຍະເວລາເຮັດວຽກສໍາລັບເຂົາເຈົ້າບໍ່ຈະແຈ້ງ ແລະ ແຮງງານອາດຖືກເອີ້ນໄປຮັບໃຊ້ວຽກເວລາໃດກໍ່ໄດ້. ແຮງງານລາວປະມານ 40% ເຮັດວຽກຫຼາຍກວ່າ 10 ຊົ່ວໂມງຕໍ່ມື້, 6 - 7 ມື້ຕໍ່ອາທິດ, ຊຶ່ງລວມແລ້ວເປັນ 60-70 ຊົ່ວໂມງ/ອາທິດ[96]. ບາງຄົນກໍ່ໄດ້ຮັບອະນຸຍາດໃຫ້ລາພັກເພາະບໍ່ສະບາຍ. ຄວາມຄິດຄວາມຝັນທີ່ແຮງງານລາວໄດ້ວາດພາບເອົາໄວ້ກ່ອນທີ່ຈະໄປເຮັດວຽກຢູ່ໄທນັ້ນມັນແຕກຕ່າງ ໄປຈາກສະພາບຄວາມເປັນຈິງທີ່ລໍຄອຍເຂົາເຈົ້າຢູ່.

## ວຽກ 'ທີ່ມີຄວາມສ່ຽງສູງ'

1. ແຮງງານເດັກນ້ອຍຜູ້ຊາຍຫຼາຍຄົນເຮັດວຽກຢູ່ໃນເຂດກໍ່ສ້າງມີຄວາມສ່ຽງຕໍ່ການເກີດອຸບັດຕິເຫດ ແລະ ຄວາມສ່ຽງທາງດ້ານສຸຂະພາບອື່ນໆເພາະປົກກະຕິວຽກປະເພດດັ່ງກ່າວນີ້ຈະມີຄວາມສ່ຽງ ແລະ ຂາດເຄື່ອງມືປ້ອງກັນ[97].

2. ຄາດຄະເນວ່າແຮງງານລາວທັງໝົດຢູ່ໄທທີ່ເຮັດວຽກຄ້າຂາຍທາງເພດມີ 5.3%[98]. ເຖິງວ່າແຮງງານເຫຼົ່ານັ້ນ ຈະບໍ່ແມ່ນ

90 ແຮງງານລາວທີ່ໄປເຮັດວຽກຢູ່ໄທປະມານ 700 ຄົນ ໄດ້ຮັບການສໍາພາດກ່ອນຈະມີການສະຫຼຸບດັ່ງທີ່ກ່າວມານີ້ (ສະຖາບັນຄົ້ນຄວ້າເສດຖະກິດແຫ່ງຊາດ, 2008).

91 ເບິ່ງ, Peason et al, (2006).

92 ແຫຼ່ງຂໍ້ມູນ: Chantavanich, Vungsiriphisal, ແລະ Laodumrongchai (2007); NERI-DOS (2008); NERI (2006); Thongyou ແລະ Ayuwat (2005); Khruemanee (2007)

93 ຄາດວ່າຈໍານວນແຮງງານລາວທີ່ໄປເຮັດວຽກໃນຂະແໜງວຽກບ້ານ (ຫຼື ຄົນຮັບໃຊ້) (ໃນປີ 2004) ມີປະມານ 37,500 - 50,000 ຄົນ. ແຮງງານທີ່ມີໃບອະນຸຍາດເຮັດວຽກໃນຂະແໜງການຄົນຮັບໃຊ້ນີ້ ມີພຽງ 1.5% , ໃນຂະແໜງກະສິກໍາ 4% , ຂະແໜງການກໍ່ສ້າງ 11% , ການປະມົງ 9% ແລະ ອຸດສາຫະກໍາປຸງແຕ່ງ 26% (Huguet ແລະ Punpuing 2005).

94 ສະຖາບັນຄົ້ນຄວ້າເສດຖະກິດແຫ່ງຊາດ (2006); Chantavanich, Vungsiriphisal, ແລະ Laodumrongchai (2007)

95 Thongyou ແລະ Ayuwat (2005).

96 NERI-DOS (2008).

97 NERI (2008).

98 ຜົນການສຶກສາວິໄຈຂອງ WVFT/ARCM (ສະມາຄົມສ່ອງໂລກຂອງໄທ/ສູນຄົ້ນຄວ້າກ່ຽວກັບແຮງງານຕ່າງດ້າວອາຊີ), ທີ່ອ້າງໃນບົດຂອງ Huguet ແລະ Punpuing (2005), ໜ້າ 67.

ເຫຍື່ອຂອງການຄ້າມະນຸດທັງໝົດກໍ່ຕາມແຕ່ກໍ່ມີຫຼາຍຄົນຕົກເປັນເຫຍື່ອ.

3. ແຮງງານທີ່ເຮັດ 'ວຽກໃຊ້ແຮງງານດ້ານຮ່າງກາຍ' ຢູ່ປະເທດໄທມີປະມານ 5.8% ຂອງແຮງງານລາວທັງໝົດທີ່ໄປເຮັດວຽກຢູ່ປະເທດໄທ. ວຽກເຫຼົ່ານີ້ເປັນວຽກ ເປື້ອນເປິ, ອັນຕະລາຍ ແລະ ຫຍຸ້ງຍາກທີ່ ປາດສາຈາກການປົກປ້ອງ ແລະ ເປັນວຽກທີ່ເຂົາເຈົ້າບໍ່ຢາກເຮັດ.

4. ຢູ່ບາງແຂວງຂອງໄທ, ແຮງງານຕ່າງດ້າວມີຂໍ້ຈຳກັດດ້ານການເຄື່ອນໄຫວ ແລະ ມີສິດທິດ້ານພົນລະເມືອງ ໜ້ອຍຫຼາຍ (ເຊັ່ນ ຢູ່ແຂວງພູເກັດ, ລະນອງ, ລະຢອງ, ສຸລາດທານີ, ກະບີ່, ພັງງາ ແລະ ຊຽງໃໝ່). ເຂົາເຈົ້າມີຂໍ້ຈຳກັດໃນດ້ານການອອກນອກສະຖານທີ່ເຮັດວຽກຫຼັງຈາກ 8 ໂມງກາງຄືນ, ການໃຊ້ໂທລະສັບມືຖື, ການໃຊ້ລົດຈັກ ແລະ ລົດໃຫຍ່ ຫຼື ການຮວມກຸ່ມກັນທີ່ຫຼາຍກວ່າ 5 ຄົນຂຶ້ນໄປ[99]. ໃນປະເພດວຽກບ້ານ ຫຼື ວຽກເປັນຄົນຮັບໃຊ້ກໍ່ຍິ່ງມີຂໍ້ຈຳກັດຫຼາຍ ໃນດ້ານການອອກນອກສະຖານທີ່ເຮັດວຽກ.

ແຮງງານຫຼາຍຄົນເຮັດວຽກໄປທັງຖືກນາຍຂູ່ຈາກນາຍຈ້າງໄປພ້ອມວ່າຈະສົ່ງຕົວໃຫ້ຕຳຫຼວດ ແລະ ເຈົ້າໜ້າທີ່ ກວດຄົນເຂົ້າເມືອງເພາະເຮັດຜິດກົດໝາຍ. ເຂົາເຈົ້າຍັງຢ້ານວ່າຈະຖືກຄະດີອາຍາໂດຍທີ່ເຂົາເຈົ້າບໍ່ໄດ້ກະທຳ ຫຍັງຜິດ. ໃນບາງກໍລະນີ, ໂດຍສະເພາະຜູ້ທີ່ເຮັດວຽກເປັນຄົນຮັບໃຊ້ກໍ່ຖືກລ່ວງເກີນ ຫຼື ໄດ້ຮັບຄວາມຮຸນແຮງທາງດ້ານຮ່າງກາຍ[100]. ແຮງງານທີ່ໄປເຮັດວຽກຢູ່ຕ່າງປະເທດກໍ່ແມ່ນມະນຸດເໝືອນກັນກັບແຮງງານຄົນອື່ນໆ. ເຂົາເຈົ້າມີຄອບຄົວ ແລະ ຮັກຄອບຄົວຂອງເຂົາເຈົ້າ. ການໃຊ້ແຮງງານເຫຼົ່ານີ້ຄືກັນກັບ *'ບໍ່ແມ່ນມະນຸດ' ມັນ ແມ່ນການລະເມີດສິດທິພື້ນຖານຂອງມະນຸດ ຊຶ່ງເປັນການສະກັດກັ້ນການພັດທະນາມະນຸດ.*

### ການຫວ່າງງານ

ແຮງງານທີ່ໄປເຮັດວຽກຢູ່ຕ່າງປະເທດຫຼາຍຄົນ, ໂດຍສະເພາະຜູ້ທີ່ເຮັດວຽກຢູ່ໃນຂະແໜງອຸດສາຫະກຳກໍ່ສ້າງ, ຕ້ອງປະສົບກັບການຫວ່າງງານ ຫຼື ການພັກວຽກໃນຊ່ວງເວລາທີ່ວຽກໜຶ່ງສຳເລັດແລ້ວ ແລະ ລໍຖ້າເຮັດວຽກໃໝ່. ຖ້າຫາກວ່າບໍລິສັດປິດກິດຈະການ ຫຼື ປົດປ່ອຍຄົນງານອອກແຮງງານບາງຄົນກໍ່ຈະເສຍວຽກໄປເລີຍ. ຖ້າຫາກວ່າບໍລິສັດພົບກັບຄວາມຫຍຸ້ງຍາກ ຫຼື ຢາກຫຼຸດຂະໜາດຂອງບໍລິສັດລົງ, ແຮງງານຕ່າງດ້າວ ຈະຕົກເປັນເປົ້າໝາຍທຳອິດທີ່ຈະຖືກປົດປ່ອຍອອກຈາກວຽກ. ປະການສຸດທ້າຍ, ຄວາມເຈັບເປັນແມ່ນສາເຫດສຳຄັນ ທີ່ເຮັດໃຫ້ແຮງງານເສຍວຽກ. ເມື່ອບໍ່ມີວຽກເຮັດງານທຳເຂົາເຈົ້າກໍ່ຕ້ອງຖືກກົດດັນໃຫ້ໃຊ້ເງິນທີ່ໄດ້ເກັບສະສົມໄວ້ ທີ່ມີຈຳນວນໜ້ອຍຢູ່ແລ້ວ. ຈາກການສຳພາດແຮງງານທີ່ຫວ່າງງານຫຼາຍຄົນພົບວ່າ ເວລາຫວ່າງງານດັ່ງກ່າວແມ່ນເວລາທີ່ຕົກຕໍ່າທີ່ສຸດຂອງເຂົາເຈົ້າ (ກ່ອງ 5.12). ມີບາງຄັ້ງທີ່ເຂົາເຈົ້າໃຊ້ເງິນທີ່ມີຢູ່ຈົນໝົດ ແລະ ບໍ່ມີທີ່ຢູ່ອາໄສໃຫ້ພັກ. ເມື່ອບໍ່ມີທາງເລືອກອື່ນ, ເຂົາເຈົ້າກໍ່ຕ້ອງຫັນໄປເພິ່ງສະຖານທູດລາວ ຫຼື ເຈົ້າໜ້າທີ່ຕຳຫຼວດເພື່ອໃຫ້ສົ່ງກັບຄືນປະເທດລາວ[101]. ສິ່ງດັ່ງກ່າວນີ້ ເຮັດໃຫ້ເຂົາເຈົ້າຕ້ອງເສຍຄ່າປັບໃໝ, ຄ່າເດີນທາງກັບ ແລະ ອາດຖືກຄຸກຢູ່ລາວ.

**ກ່ອງ 5.12: ການຕົກທອດຂອງຄວາມທຸກຍາກ**

ຢູ່ບ້ານປາກທວຍ, ແຂວງ ບໍລິຄຳໄຊ, ມີຜົວເມຍຄູ່ໜຶ່ງ ອອກໄປຊອກເຮັດວຽກຢູ່ປະເທດໄທນຳກັນ. ໃນກໍລະນີນີ້, ສອງຜົວເມຍດັ່ງກ່າວ ປະຖິ້ມລູກສາວອາຍຸ 12 ປີ ແລະ ລູກຊາຍອາຍຸ 4 ເດືອນໄວ້ກັບພໍ່ແມ່ (ຊຶ່ງແມ່ນພໍ່ເຖົ້າແມ່ເຖົ້າຂອງເດັກນ້ອຍ). ເຂົາເຈົ້າໄດ້ອອກຈາກບ້ານໄປເຮັດວຽກໄດ້ກວ່າໜຶ່ງປີແລ້ວ ແຕ່ກໍ່ບໍ່ໄດ້ມີເງິນປະຢັດ ຫຼື ສົ່ງເງິນກັບບ້ານຈົນຮອດປະຈຸບັນ. ບັນຫາມີຢູ່ວ່າ ເຂົາເຈົ້າຕ້ອງພົບກັບສະພາບຫວ່າງງານເລື້ອຍໆ ຊຶ່ງເຮັດໃຫ້ມີຄ່າໃຊ້ຈ່າຍອື່ນໆລວມເຖິງດ້ານສຸຂະພາບ. ຕົວຈິງ, ໃນສອງສາມເດືອນທຳອິດ, ເຂົາເຈົ້າໄດ້ສົ່ງເງິນກັບບ້ານແຕ່ກໍ່ມີໜ້ອຍຫຼາຍ ແລະ ບໍ່ພຽງພໍກັບຄວາມຕ້ອງການພື້ນຖານຂອງເດັກນ້ອຍຢູ່ບ້ານ.

ພໍ່ກັບແມ່ກໍ່ເຖົ້າແກ່ ແລະ ທຸກຍາກ. ເຂົາເຈົ້າຍິ່ງຕ້ອງພົບກັບຄວາມຫຍຸ້ງຍາກທາງການເງິນທີ່ຕ້ອງໄດ້ລ້ຽງດູເດັກນ້ອຍ. ນີ້ແມ່ນກໍລະນີຕົວຢ່າງທີ່ເຄີຍມີມາໃນການຖ່າຍທອດສະພາບຄວາມທຸກຍາກຂອງຜູ້ໜຶ່ງໄປສູ່ຄົນຮຸ່ນກ່ອນ.

***ແຫຼ່ງຂໍ້ມູນ:*** *ສະຖາບັນຄົ້ນຄວ້າເສດຖະກິດແຫ່ງຊາດ (2008).*

### ການເຊື່ອມສານເຂົ້າໃນສັງຄົມ ແລະ ການເຂົ້າເຖິງການບໍລິການສາທາລະນະ

ແຮງງານລາວທີ່ໄປເຮັດວຽກຢູ່ປະເທດໄທແບບຜິດກົດໝາຍຈະມີຄວາມຮູ້ສຶກດ້ອຍກວ່າຄົນອື່ນໃນສັງຄົມໄທ ແລະ ຂາດຄວາມໝັ້ນໃຈ, ເຮັດໃຫ້ເຂົາເຈົ້າ ເອົາຕົວຫ່າງເຫີນຈາກກິດຈະກຳຕ່າງໆຂອງຊຸມຊົນໃນປະເທດໄທ. ນອກຈາກນີ້, ລັກສະນະຂອງວຽກງານເຂົາເຈົ້າກໍ່ຂ້ອນຂ້າງໂດດດ່ຽວຈາກສັງຄົມ ເຊັ່ນ: ວຽກບ້ານການເຮືອນທີ່ຕ້ອງເຮັດຢູ່ກັບແຕ່ນາຍຈ້າງ, ຜູ້ທີ່ເຮັດວຽກການປະມົງ ກໍ່ຕ້ອງອອກສູ່ທະເລ ແລະ ອື່ນໆ[102]. ສັງຄົມ ແລະ ນາຍຈ້າງໄທກໍ່ເຊັ່ນດຽວກັນມີທັດສະນະແບ່ງແຍກຕໍ່ແຮງງານຕ່າງດ້າວ. ຈາກຜົນການສຳຫຼວດຄວາມຄິດເຫັນຢູ່ໄທ, ນາຍຈ້າງ ແລະ ແຮງງານໄທສ່ວນໃຫຍ່ເຫັນວ່າແຮງງານໄທຄວນຈະໄດ້ຮັບຄ່າຈ້າງສູງກວ່າແຮງງານຕ່າງດ້າວໃນວຽກດຽວກັນ[103]. ຄົນໄທຫຼາຍຄົນຍັງມີທັດສະນະວ່າແຮງງານຕ່າງດ້າວ ເຂົ້າມາຍາດວຽກຂອງເຂົາເຈົ້າ, ເຮັດໃຫ້ເກີດການຫວ່າງງານໃນທ້ອງຖິ່ນ ແລະ ກົດດັນໃຫ້ຄ່າຈ້າງຫຼຸດລົງ.

ແນ່ນອນວ່າ ແຮງງານໄປເຮັດວຽກຢູ່ປະເທດໄທທີ່ບໍ່ໄດ້ຮັບການຈົດທະບຽນຈະບໍ່ກ້າເຂົ້າໄປໃຊ້ບໍລິການສາທາລະນະຕ່າງໆ ເຊັ່ນ ໂຮງໝໍ. ຂະໜາດວ່າແຮງງານທີ່ຈົດທະບຽນແລ້ວກໍ່ຍັງມີຂໍ້ຈຳກັດດ້ານການເຄື່ອນຍ້າຍໄປມາໃນເຂດພື້ນທີ່ຕ່າງໆຂອງໄທ. ຜູ້ທີ່ເຮັດວຽກຫຼາຍຊົ່ວໂມງໃນມື້ໜຶ່ງ ເຊັ່ນແຮງງານທີ່ເຮັດວຽກບ້ານ ແລະ ວຽກກະສິ

99 ແຫຼ່ງຂໍ້ມູນ: Action Network for Migrants – ປະເທດໄທ, ພະຈິກ 2007; http://www.ahrchk.net/pr/mainline.php/2007mr/476/

100 Chantavanich, Vungsiriphisal, ແລະ Laodumrongchai (2007); Phetsiriseng (2003).

101 ຂໍ້ມູນໄດ້ມາຈາກການສົນທະນາກັບກຸ່ມຕົວແທນທີ່ມີແຮງງານໄປເຮັດວຽກຢູ່ໄທ ແລະ/ຫຼື ຜູ້ທີ່ກັບມາຖາວອນ ຢູ່ແຂວງບໍລິຄຳໄຊ, ໄຊຍະບູລີ ແລະ ຈຳປາສັກ.

102 Chantavanich, Vungsiriphisal, ແລະ Laodumrongchai (2007).

103 UNIFEMŒILO (2006)

ກໍາມັກຈະພົບກັບຄວາມຫຍຸ້ງຍາກທີ່ຈະມີເວລາພັກເພື່ອໄປກວດ ຫຼື ປິ່ນປົວສຸຂະພາບຕ່າງໆ.

## *ສະຫຼຸບຫຍໍ້:*

*ແຮງງານສ່ວນໃຫຍ່ ທີ່ໄປເຮັດວຽກຢູ່ປະເທດໄທ ກໍ່ບໍ່ຕ່າງຈາກແຮງງານທີ່ຢູ່ໃນຂະແໜງວຽກທີ່ມີລາຍຮັບຕໍ່າໃນຕົວເມືອງ ແມ່ນບໍ່ໄດ້ຮັບການປົກປ້ອງຈາກກົດໝາຍ ເຖິງວ່າແຮງງານເຫຼົ່ານັ້ນຈະໄດ້ຮັບການປົກປ້ອງກໍ່ຕາມ, ແຕ່ການປະຕິບັດກົດໝາຍກໍ່ຍັງມີຂີດຈໍາກັດຢູ່. ໃນທາງປະຕິບັດແລ້ວ, ແຮງງານຫຼາຍຄົນຕ້ອງເຮັດວຽກຫຼາຍເກີນຂອບເຂດ, ເຮັດວຽກເປື້ອນເປິ, ອັນຕະລາຍ ແລະ ຫຍຸ້ງຍາກ ແລະ ທັງຖືກຂູດຮີດແຮງງານ. ນອກຈາກນັ້ນ, ກໍ່ຍັງມີຄວາມສ່ຽງຕໍ່ການຖືກຫຼອກລວງ. ການມີລະບຽບການ ໃນຂົງເຂດວຽກງານດັ່ງກ່າວ ບໍ່ວ່າຈະໃນຮູບການໃດກໍ່ຕາມ ຈະສາມາດຊ່ວຍບັນເທົາສະພາບດັ່ງກ່າວລົງໄດ້.*

## ການສົ່ງເງິນກັບບ້ານ

ແຮງງານລາວຢູ່ປະເທດໄທສົ່ງເງິນສ່ວນໃຫຍ່ກັບບ້ານຜ່ານຊ່ອງທາງໂອນເງິນນອກລະບົບ ຫຼື ຜ່ານເຄືອຂ່າຍໂອນເງິນເອກະຊົນຍ້ອນວ່າ ແຮງງານເຫຼົ່ານັ້ນ ສ່ວນໃຫຍ່ແມ່ນເຮັດວຽກນອກລະບົບ. ພວກເຂົາເຈົ້າຂາດຄວາມຮູ້ກ່ຽວກັບການໂອນເງິນຖືກຕ້ອງຕາມກົດໝາຍ. ຫົວໜ່ວຍທະນາຄານຢູ່ເຂດຫ່າງໄກສອກຫຼີກ ກໍ່ມີຈໍານວນໜ້ອຍ ແລະ ການໂອນເງິນຈໍານວນໜ້ອຍຜ່ານຊ່ອງທາງຖືກກົດໝາຍກໍ່ມີຄ່າໃຊ້ຈ່າຍສູງ.

**ກ່ອງ 5.13: ຄົນທີ່ທ່ານເຊື່ອໃຈ ອາດບໍ່ຈິງໃຈ**

ແຮງງານລາວທີ່ໄປເຮັດວຽກຢູ່ປະເທດໄທ ທີ່ເຮັດວຽກຢູ່ເຂດກໍ່ສ້າງ ໂດຍທົ່ວໄປແລ້ວຈະໄດ້ຮັບຄ່າແຮງງານໃນທຸກໆສອງອາທິດ. ຫຼັງຈາກໝົດສັນຍາແຮງງານແລ້ວ, ເຂົາເຈົ້າກໍ່ຈະໄປເຮັດວຽກກັບນາຍຈ້າງຄົນອື່ນ. ແຕ່ວ່າ ໃນບາງກໍລະນີ, ການຮັບເງິນງວດສຸດທ້າຍອາດຈະຖືກອຸບາຍຕ່າງໆນາໆຈາກນາຍຈ້າງ. ເມື່ອວຽກກໍ່ສ້າງໃກ້ຈະສໍາເລັດລົງ ນາຍຈ້າງຫຼາຍຄົນມັກຈະຫຼີກຫຼ່ຽງການຈ່າຍເງິນງວດສຸດທ້າຍໃຫ້ແກ່ແຮງງານ. ເຂົາເຈົ້າຈະຂູ່ວ່າຈະແຈ້ງຕໍາຫຼວດມາຈັບ ຊຶ່ງເປັນການບັງຄັບແຮງງານຕ່າງດ້າວໂດຍທາງອ້ອມ ເພື່ອໃຫ້ອອກຈາກວຽກໄປໂດຍບໍ່ໄດ້ຮັບຄ່າຈ້າງ. ຜູ້ໃດໂຊກດີກໍ່ຈະໜີຕໍາຫຼວດໄປໄດ້ ແລະ ຜູ້ໃດໂຊກຮ້າຍກໍ່ຕ້ອງຈ່າຍຄ່າປັບໃໝ ແລະ ຈ່າຍເງິນສິນບົນສູງ. ສ່ວນຜູ້ທີ່ໂຊກຮ້າຍທີ່ສຸດກໍ່ແມ່ນຖືກເຂົ້າຄຸກ ແລະ ຖືກຢຶດເອົາຊັບສິນຕ່າງໆໄປໝົດ.

ກໍລະນີຮ້າຍແຮງທີ່ສຸດທີ່ໄດ້ຮັບການລາຍງານມາ ກໍ່ຄື ມີແຮງງານຜູ້ຊາຍຜູ້ໜຶ່ງທີ່ໄປເຮັດວຽກຢູ່ປະເທດໄທ (ຈາກບ້ານບົວບານ, ແຂວງໄຊຍະບູລີ) ໃນລະຫວ່າງການເດີນທາງກັບບ້ານຫຼັງຈາກໄດ້ຮັບເງິນງວດສຸດທ້າຍແລ້ວ, ແຮງງານຜູ້ນັ້ນຖືກປຸ້ນ ແລະ ຂ້າຕາຍຍ້ອນຕໍ່ສູ້ກັບໂຈນ. ມີຂ່າວເລົ່າລືກັນວ່າ ນາຍຈ້າງຜູ້ກ່ອນຂອງລາວມີສ່ວນກ່ຽວຂ້ອງກັບຄະດີນີ້.

***ແຫຼ່ງຂໍ້ມູນ:*** *ສະຖາບັນຄົ້ນຄວ້າເສດຖະກິດແຫ່ງຊາດ (2008).*

### ຊ່ອງທາງການໂອນເງິນ[104]

ຊ່ອງທາງໃນການໂອນເງິນທີ່ມີຂອງແຮງງານລາວຢູ່ໄທສາມາດຈັດປະເພດໄດ້ດັ່ງຕໍ່ໄປນີ້:

1. ການບໍລິການທະນາຄານເປັນທາງການ ຫຼື ທະນາບັດ,
2. ນາຍໜ້າ ແລະ ຄົນກາງ,
3. ບຸກຄົນຖືເງິນກັບບ້ານດ້ວຍຕົນເອງ, ແລະ
4. ພີ່ນ້ອງ ຫຼື ໝູ່ຄູ່ຖືເງິນເມືອໃຫ້

### ຊ່ອງທາງທີ່ເປັນທາງການ: ການບໍລິການຂອງທະນາຄານຢູ່ລາວ

ແຮງງານລາວທີ່ເຮັດວຽກຢູ່ປະເທດໄທຈໍານວນໜ້ອຍ ໂອນເງິນຜ່ານຊ່ອງທາງທີ່ເປັນທາງການ ເນື່ອງຈາກວ່າ ການບໍລິການດັ່ງກ່າວຢູ່ເຂດຊົນນະບົດມີບໍ່ຫຼາຍ. ໃນລາວມີທະນາຄານຢູ່ 14 ແຫ່ງ, ໃນນັ້ນມີພຽງ 9 ແຫ່ງມີສາຂາ ແລະ ມີໜ່ວຍບໍລິການສອງສາມແຫ່ງຢູ່ໃນສະເພາະບາງແຂວງເທົ່ານັ້ນ[105]. ດັ່ງນັ້ນ, ຈຶ່ງມີພຽງແຕ່ສອງສາມຄົວເຮືອນໃນເຂດຊົນນະບົດສາມາດເຂົ້າເຖິງການບໍລິການທະນາຄານໄດ້. ສະຖາບັນການເງິນຈຸລະພາກ ມີສ່ວນຊ່ວຍຫຼຸດຊ່ອງຫວ່າງໃນດ້ານນີ້: ໃນທົ່ວປະເທດ ມີຜູ້ໃຫ້ບໍລິການດ້ານການເງິນຈຸລະພາກຢູ່ 190 ແຫ່ງ[106]. ໃນ ປີ 2006 ມີຜູ້ຖືບັນຊີການເງິນຈຸລະພາກ 229,579 ຄົນ (ຫຼື 6.5 % ຂອງປະຊາກອນທີ່ມີອາຍຸລະຫວ່າງ 18-64 ປີ). ທາງດ້ານທີ່ຕັ້ງພູມສັນຖານແລ້ວ, ສະຖາບັນເຫຼົ່ານີ້ ສາມາດເຂົ້າເຖິງບ້ານໃນທົ່ວປະເທດໄດ້ພຽງ 47.5%. ເຖິງຢ່າງໃດກໍ່ຕາມ, ຂະແໜງການດັ່ງກ່າວ ຍັງປະສົບກັບຫຼາຍບັນຫາເຊັ່ນ ລະດັບຄວາມສາມາດຕໍ່າ, ຂາດການປະສານງານພາຍໃນ ແລະ ການປະສານງານ ກັບ ລະບົບທະນາຄານຂະໜາດໃຫຍ່, ການກະຈາຍການບໍລິການຍັງຈໍາກັດ ແລະ ຂາດມາດຕະຖານທີ່ເປັນເອກະພາບກັນ. ຄວາມສາມາດໃນການສະໜອງການບໍລິການໂອນເງິນລະຫວ່າງປະເທດຂອງສະຖາບັນການເງິນເຫຼົ່ານີ້ເປັນທີ່ຮູ້ຈັກກັນໜ້ອຍຫຼາຍ.

ໃນແນວຄວາມຄິດຂອງແຮງງານທີ່ໄປເຮັດວຽກຢູ່ຕ່າງປະເທດ ແລະ ຄອບຄົວຂອງເຂົາເຈົ້າເຫັນວ່າ ຊ່ອງທາງໂອນເງິນທີ່ເປັນທາງການທັງໝົດລ້ວນແຕ່ມີຄວາມຫຍຸ້ງຍາກສັບສົນ ແລະ ເກັບຄ່າບໍລິການແພງ. ນອກຈາກນີ້, ລະບົບດັ່ງກ່າວກໍ່ບໍ່ໄດ້ຈັດຕັ້ງຂຶ້ນມາເພື່ອຈຸດປະສົງໃຫ້ການບໍລິການໂອນເງິນຈໍານວນໜ້ອຍເພື່ອການປະຢັດ.

### ຊ່ອງທາງບໍ່ເປັນທາງການ: ນາຍໜ້າ ແລະ ຄົນກາງ

ວິທີການໂອນເງິນທີ່ນໍາໃຊ້ກັນຫຼາຍທີ່ສຸດ ແມ່ນຜ່ານນາຍໜ້າທີ່ບໍ່ເປັນທາງການ. ນາຍໜ້າຫຼາຍກວ່າໜຶ່ງຄົນ ສາມາດເຂົ້າມາໃຫ້

104 ILO (2007); Thongyou ແລະ Ayuwat (2005); NERI (2006); NERI (2008).
105 ແຫຼ່ງຂໍ້ມູນ: ທະນາຄານແຫ່ງ ສປປ ລາວ, ອ້າງໃນ NERI (2008), ໜ້າ. 32.
106 ຂໍ້ມູນກ່ຽວກັບການເງິນຊົນນະບົດແລະການເງິນຈຸລະພາກ, 2006, NERI.

ການບໍລິການໄດ້ໂດຍຂຶ້ນກັບທີ່ຕັ້ງຂອງຜູ້ສົ່ງ ແລະ ຜູ້ຮັບ. ກ່ອນອື່ນໝົດ, ເງິນຈະຖືກໂອນເຂົ້າບັນຊີທະນາຄານຂອງນາຍໜ້າຢູ່ປະເທດໄທ ທີ່ຢູ່ໃກ້ກັບຊາຍແດນ. ຂໍ້ມູນກ່ຽວກັບການໂອນເງິນນີ້ຈະຖືກສົ່ງໄປຍັງນາຍໜ້າ ຢູ່ປະເທດລາວ ທີ່ເປັນຜູ້ແຈ້ງໃຫ້ຄອບຄົວຂອງຜູ້ຝາກເງິນຊາບ. ຂັ້ນຕອນສຸດທ້າຍ, ຄອບຄົວຜູ້ຝາກເງິນຈະຂ້າມຊາຍແດນໄປຮັບເອົາເງິນກັບນາຍໜ້າຢູ່ຝັ່ງປະເທດໄທ. ໃນບາງກໍລະນີ, ນາຍໜ້າກໍ່ຍັງ ນຳເອົາເງິນໄປໃຫ້ຢູ່ກັບບ້ານຂອງຜູ້ຮັບເລີຍ, ຊຶ່ງແນ່ນອນວ່າມີຄ່າບໍລິການເພີ່ມ. ຄ່າບໍລິການການໂອນເງິນ ແມ່ນ ມີຕັ້ງແຕ່ 2-10% ໂດຍຂຶ້ນກັບສະຖານທີ່, ຈຳນວນເງິນ ແລະ ຈຳນວນຄົນກາງທີ່ເຂົ້າມາກ່ຽວຂ້ອງ. ນາຍໜ້າຄົນໃດທີ່ເລີ່ມໃຫ້ບໍລິການປະເພດດັ່ງກ່າວຢູ່ຂົງເຂດໃດໜຶ່ງກ່ອນໝູ່ຈະຄອງຕະຫຼາດໄດ້ດີກວ່າ ຖ້າເປັນທີ່ຍອມຮັບຈາກປະຊາຊົນ. ວິທີໃໝ່ໃນການໂອນເງິນ, ເຖິງວ່າຈະຍັງບໍ່ທັນຮູ້ຈັກທົ່ວໄປກໍ່ແມ່ນແຮງງານເອງເປີດບັນຊີທີ່ມີບັດຖອນເງິນສົດ ATM ຢູ່ປະເທດໄທ. ແຮງງານຕ່າງດ້າວຜິດກົດໝາຍທີ່ບໍ່ໄດ້ຈົດທະບຽນຢູ່ປະເທດໄທກໍ່ສາມາດມີບັດຖອນເງິນສົດໄດ້ຖ້າວ່ານາຍຈ້າງໄທຂອງເຂົາເຈົ້າຫາກຊ່ວຍ (ເຊັ່ນ: ໃຫ້ຢືມຊື່). ເຂົາເຈົ້າຈະຖອນເງິນໄດ້ຈາກສາຂາທະນາຄານທີ່ຢູ່ເມືອງຕິດກັບຊາຍແດນໄທກ່ອນຈະກັບມາລາວ. ໃນເວລານັ້ນ, ບັດ ATM ຈະຖືກສົ່ງມອບໃຫ້ກັບພີ່ນ້ອງຜູ້ທີ່ຈະຂ້າມຊາຍແດນໄປຖອນເງິນ.

ບັນດາແຮງງານລາວທີ່ໄປເຮັດວຽກຢູ່ປະເທດໄທມັກຈະສົ່ງເງິນກັບບ້ານຜ່ານລະບົບບໍ່ເປັນທາງການເພາະບໍ່ມີການຈົດບັນທຶກຢ່າງເປັນລະບົບ ຫຼື ບໍ່ມີຄວາມຈຳເປັນຕ້ອງໄດ້ສະແດງບັດປະຈຳຕົວ[107]. ຄຽງຄູ່ກັນນີ້, ຊ່ອງທາງເຫຼົ່ານີ້ຍັງສົ່ງເງິນໃຫ້ໄວ ແລະ ເກັບຄ່າບໍລິການກໍ່ຕ່ຳ. ໂດຍສະເລ່ຍແລ້ວ, ການຊຳລະສະສາງຜ່ານບັນຊີຂອງນາຍໜ້າ ແມ່ນໃຊ້ເວລາພາຍໃນສອງສາມຊົ່ວໂມງ ຫຼື ພາຍໃນໜຶ່ງມື້ເທົ່ານັ້ນ. ຜູ້ທີ່ໃຫ້ການບໍລິການໂອນເງິນແບບບໍ່ເປັນທາງການນີ້ບໍ່ໄດ້ປະຕິບັດຕາມລະບຽບການຫຍັງເລີຍ. ດັ່ງນັ້ນ, ຕົ້ນທຶນຂອງເຂົາເຈົ້າກໍ່ຄືຄ່າໂອນເງິນຈຶ່ງຕ່ຳກວ່າຖ້າທຽບໃສ່ທະນາຄານ.

## ຄວາມສ່ຽງຂອງການໂອນເງິນ[108]

ເຖິງຢ່າງໃດກໍ່ຕາມ, ບໍ່ແມ່ນວ່າການໂອນເງິນນອກລະບົບ ຫຼື ບໍ່ເປັນທາງການທຸກຢ່າງຈະດີໝົດ. ການໂອນເງິນ ດ້ວຍວິທີທາງນີ້ກໍ່ມີຄວາມສ່ຽງເຊັ່ນດຽວກັນ.

*ການສົ່ງເງິນຜ່ານບັນຊີທະນາຄານຂອງນາຍໜ້າ* ມີຄວາມສ່ຽງເກີດຂຶ້ນຖ້າຫາກວ່າ ມີຫຼາຍຄົນກາງເຂົ້າມາກ່ຽວຂ້ອງ. ການໂອນເງິນອາດຊັກຊ້າ ແລະ ເພີ່ມຕົ້ນທຶນ. ອັດຕາໂອນເງິນທີ່ບໍ່ເປັນມາດຕະຖານຍັງເຮັດໃຫ້ບັນຫາມີຄວາມສັບຊ້ອນຫຼາຍຂຶ້ນ ແລະ ເຮັດໃຫ້ມີຊ່ອງຫວ່າງເກີດຄວາມບໍ່ຊື່ສັດ. ໃນກໍລະນີໃດກໍ່ຕາມ, ການໂອນເງິນຈຳນວນໜ້ອຍຈະມີຄ່າໃຊ້ຈ່າຍແພງ. ຄ່າໃຊ້ຈ່າຍສະເລ່ຍໃນການໂອນເງິນອາດຫຼຸດລົງໄດ້ໂດຍການ 'ທ້ອນເງິນໄວ້' ແລະ ສົ່ງໃນຈຳນວນຫຼາຍບາດດຽວແຕ່ບໍ່ສົ່ງເລື້ອຍໆ. ເຖິງຢ່າງໃດກໍ່ຕາມ, ການເຮັດແນວນີ້ກໍ່ອາດ ເປັນໄປໄດ້ຍາກ ເພາະວ່າແຮງງານລາວສ່ວນໃຫຍ່ມີ ເງິນຈຳນວນໜ້ອຍ ແລະ ກໍ່ບໍ່ສາມາດລໍຖ້າດົນໄດ້ເນື່ອງຈາກເຂົາເຈົ້າ ບໍ່ມີບ່ອນທີ່ປອດໄພ ເພື່ອເກັບຮັກສາເງິນໄວ້ຢູ່ປະເທດໄທ. ວິທີໜຶ່ງທີ່ຍັງບໍ່ທັນໄດ້ທົດລອງໃຊ້ ແມ່ນວ່າກຸ່ມຂອງແຮງງານລາວທີ່ໄປເຮັດວຽກຢູ່ປະເທດໄທໂຮມເງິນປະຢັດຂອງເຂົາເຈົ້າເຂົ້າກັນໃຫ້ເປັນເງິນ 'ກ້ອນໃຫຍ່', ຈາກນັ້ນກໍ່ໂອນ ແລະ ມາແບ່ງຢາຍກັນຢູ່ລາວ.

*ການຖືເງິນກັບບ້ານດ້ວຍຕົນເອງ:* ຊ່ອງທາງນີ້ແມ່ນໃຊ້ກັນເປັນປະຈຳກັບຜູ້ທີ່ເຮັດວຽກຢູ່ແຂວງທີ່ຕິດຕໍ່ກັບຊາຍແດນໄທ ຫຼື ໂດຍແຮງງານທີ່ກັບບ້ານໃນຍາມພັກ. ຊ່ອງທາງນີ້ມີຄວາມສ່ຽງທີ່ຈະເຮັດເງິນເສຍກາງທາງໄດ້; ດັ່ງນັ້ນ, ໃນການເດີນທາງແຕ່ລະຄັ້ງ ເຂົາເຈົ້າຈຶ່ງຖືເງິນຈຳນວນໜ້ອຍ. ຖ້າຫາກຖືກຈັບກາງທາງ ແລະ ຖືກສົ່ງກັບບ້ານແຮງງານເຫຼົ່ານັ້ນກໍ່ຈະສູນເສຍຊັບສິນບາງສ່ວນ ຫຼື ທັງໝົດທີ່ເອົາຕິດໂຕໄປນຳ (ລວມທັງເງິນທີ່ຖືກຍຶດ). ການໃຫ້ສິນບົນແມ່ນມີແຜ່ຫຼາຍ: ຜູ້ທີ່ເຮັດວຽກຢູ່ເຂດຊາຍແດນຈ່າຍໜ້ອຍ ແລະ ໜີໄປໄດ້, ແຕ່ຜູ້ອື່ນໆອາດຈະບໍ່ໂຊກດີປານໃດ (ກ່ອງ 5.13)[109].

*ພີ່ນ້ອງຫຼືໝູ່ເພື່ອນຖືເງິນກັບບ້ານມາໃຫ້ແກ່ຄອບຄົວຂອງແຮງງານທີ່ເຮັດວຽກຢູ່ປະເທດໄທ:* ເຂົາເຈົ້າອາດແມ່ນຄົນໄທ ຫຼື ຄົນລາວທີ່ເດີນທາງໄປມາ; ເຂົາເຈົ້າອາດແມ່ນແຮງງານທີ່ໄປເຮັດວຽກຢູ່ປະເທດໄທ ເດີນທາງກັບມາເອງ. ຊ່ອງທາງສົ່ງເງິນກັບບ້ານຄືແນວນີ້

**ກ່ອງ 5.14: ຄວາມສາມັກຄີໃນສັງຄົມ: ຄືຄ່າຂອງຄວາມຈະເລີນ**

ຢູ່ບ້ານບົວບານ (ແຂວງໄຊຍະບູລີ), ກຸ່ມແຮງງານເພດຍິງທີ່ເຄີຍອອກໄປເຮັດວຽກຢູ່ໄທຕອນອາຍຸໄດ້ 18 ປີ (ຫຼື ນ້ອຍກວ່ານັ້ນ) ໄດ້ກັບຄືນມາບ້ານພ້ອມກັບຄວາມປ່ຽນແປງໄປ. ການທີ່ເຂົາເຈົ້າຍັງໜຸ່ມເຮັດໃຫ້ເຊື່ອມຊຶມເອົາວັດທະນະທຳໄທ ແລະ ການເວົ້າຈາລວມເຖິງສຳນຽງສຽງເວົ້າໄທ. ດັ່ງນັ້ນ, ເຂົາເຈົ້າຈຶ່ງເບິ່ງແຕກຕ່າງໄປຈາກຄົນອື່ນ: ເຂົາເຈົ້າບໍ່ເວົ້າລາວແບບສຳນຽງລາວ. ເວລາສົນທະນາກັນ, ເຂົາເຈົ້າຍັງເວົ້າພາສາລາວ ແລະ ໄທປົນເປກັນໄປ. ໃນລະຫວ່າງການສຳຫຼວດຢູ່ພາກສະໜາມ, ໜຶ່ງໃນຜູ້ທີ່ຖືກເລືອກ ມາສຳພາດຍັງເກີດຄວາມຮູ້ສຶກຢ້ານທີ່ຈະເວົ້າກັບຄະນະສຳຫຼວດ ເພາະລາວຢ້ານວ່າ ລາວຈະບໍ່ສາມາດເວົ້າພາສາລາວໄດ້ຖືກຕ້ອງຕາມສຳນຽງລາວ.

ເຖິງແມ່ນວ່າການກັບຄືນມາຢູ່ຮ່ວມກັບຊຸມຊົນໃນບ້ານຈະບໍ່ມີບັນຫາຫຼາຍກໍ່ຕາມ, ແຕ່ຜູ້ທີ່ກັບຄືນມາເຫຼົ່ານີ້ກໍ່ພົບວ່າ ເຂົາເຈົ້າຖືກເບິ່ງແຕກຕ່າງໄປຈາກໝູ່ເພື່ອນຜູ້ຍິງດ້ວຍກັນທີ່ບໍ່ເຄີຍເຮັດວຽກຢູ່ປະເທດໄທມາກ່ອນ. ໜຶ່ງໃນກຸ່ມນີ້ໄດ້ກ່າວວ່າ "...ເພາະວ່າພວກເຮົາເຄີຍເຮັດວຽກຢູ່ປະເທດໄທ ແລະ ມີເງິນຊື້ເສື້ອຜ້າ ແລະ ເຄື່ອງສຳ ອາງດີໆມາໃຊ້, ເມື່ອແຕ່ງແລ້ວ ພວກເຮົາຈຶ່ງເບິ່ງງາມກວ່າຖ້າທຽບໃສ່ແມ່ຍິງຄົນອື່ນ. ເຂົາເຈົ້າບໍ່ສາມາດເຂົ້າກັບພວກເຮົາໄດ້ຄືກັບແຕ່ກ່ອນເພາະວ່າ ເຂົາເຈົ້າອິດສາພວກເຮົາ...ເຂົາເຈົ້າບໍ່ມີເຄື່ອງນຸ່ງ ແລະ ເຄື່ອງສຳອາງດີໆຄືພວກເຮົາ... ນອກຈາກນີ້ ເມື່ອພວກເຮົາເບິ່ງງາມກວ່າ, ຜູ້ຊາຍຫຼາຍຄົນໃນບ້ານ ຊຶ່ງໃນເມື່ອກ່ອນເຄີຍສົນໃຈແມ່ຍິງເຫຼົ່ານັ້ນ ກໍ່ໄດ້ຫັນມາສົນໃຈພວກເຮົາ. ສິ່ງຕ່າງໆເຫຼົ່ານີ້ ເຮັດໃຫ້ເຂົາເຈົ້າບໍ່ມັກພວກເຮົາອີກຕໍ່ໄປ". ເນື່ອງຈາກຖືກເບິ່ງວ່າ 'ແຕກຕ່າງຫຼາຍ', ແຮງງານເພດຍິງທີ່ກັບຄືນມາສ່ວນໃຫຍ່ແມ່ນຈະມີສັງຄົມສະເພາະກັບກຸ່ມເຂົາເຈົ້າເອງ.

***ແຫຼ່ງຂໍ້ມູນ:*** *ສະຖາບັນຄົ້ນຄວ້າເສດຖະກິດແຫ່ງຊາດ (2008).*

107 Hernandez-Coss (2005), ILO (2007), NERI (2008).

108 ຂໍ້ມູນຈາກການສຳຫຼວດພາກສະໜາມທີ່ລາຍງານຢູ່ໃນ NERI (2008); Grace (2005).

109 ຂໍ້ມູນໄດ້ຈາກການສຳພາດກັບເຈົ້າໜ້າທີ່ຂອງພະແນກແຮງງານແລະສະຫວັດດີການສັງຄົມແຂວງຈຳປາສັກແລະໄຊຍະບູລີ. ຍັງສາມາດເບິ່ງໄດ້ຈາກ ສະຖາບັນແມ່ຂອງ (2007).

**ກ່ອງ 5.15: ສິ່ງລໍ້ລວງໃຈ ແລະ ອື່ນໆ**

ຢູ່ບ້ານໜອງບົວ (ແຂວງຈຳປາສັກ), ຄົນທຳອິດທີ່ມີໂທລະສັບມືຖື ແມ່ນແຮງງານຍິງທີ່ໄປເຮັດວຽກຢູ່ໄທ ພຽງແຕ່ປີດຽວ. ລາວມີເງິນກັບມາຈຳນວນຫຼວງຫຼາຍ ແລະ ພຽງພໍສຳລັບຕັ້ງຮ້ານຂາຍເຄື່ອງນ້ອຍໆແຫ່ງໜຶ່ງ. ລາວຈະຍ້ອງຍໍ ແລະ ເວົ້າເຖິງການໄປເຮັດວຽກຢູ່ປະເທດໄທວ່າດີ. ເຖິງຢ່າງໃດກໍ່ຕາມ, ຕາມການລາຍງານຂອງອຳນາດການປົກຄອງເມືອງເຂົາເຈົ້າເຊື່ອວ່າແມ່ຍິງຫຼາຍຄົນທີ່ໄປເຮັດວຽກ ເປັນຄົນໃຊ້ຢູ່ປະເທດໄທ ແລະ ໄດ້ຮັບເງິນຄ່າຈຳນວນຫຼວງຫຼາຍໃນໄລຍະເວລາອັນສັ້ນ ສ່ວນໃຫຍ່ແມ່ນ ໄດ້ຈາກການຂາຍບໍລິການ: 'ການຈ້າງໃຫ້ມີຄວາມສຳພັນ' ກັບນາຍຈ້າງຜູ້ຊາຍຂອງພວກເຂົາ ຫຼື ກັບຜູ້ອື່ນ. ໃນຫຼາຍກໍລະນີ, ແຮງງານທີ່ໄປເຮັດວຽກຢູ່ປະເທດໄທ ກໍ່ສະໝັກໃຈເຮັດວຽກຕາມຊ່ອງທາງທີ່ກ່າວມານີ້ເພື່ອຫາລາຍໄດ້ເສີມ, ແຕ່ວ່າໃນບາງກໍລະນີເຂົາເຈົ້າບໍ່ມີທາງເລືອກ.

ການເຕົ້າໂຮມເອົາເຂົາເຈົ້າກັບຄືນມາປະເທດຂອງຕົນເອງເປັນສິ່ງທີ່ມີຄວາມສຳຄັນທີ່ສຸດ, ແຕ່ວ່າຈະເຮັດແນວໃດ? ມັນບໍ່ມີຄຳຕອບທີ່ງ່າຍດາຍ!

***ແຫຼ່ງຂໍ້ມູນ:*** *ສະຖາບັນຄົ້ນຄວ້າເສດຖະກິດແຫ່ງຊາດ (2008).*

ຈະບໍ່ມີຄ່າໃຊ້ຈ່າຍຫຍັງ ແຕ່ວ່າຄວາມເຊື່ອຖືໄດ້ ແມ່ນຂຶ້ນກັບວ່າຜູ້ຝາກເງິນມີຄວາມເຊື່ອໃຈຕໍ່ຜູ້ທີ່ຖືເງິນກັບມາໃຫ້ນັ້ນໜ້ອຍຫຼາຍປານໃດ.

*ພີ່ນ້ອງໄປຮັບເອົາເງິນຢູ່ໄທ:* ການໂອນເງິນກັບມືໃຫ້ກັນກໍ່ບໍ່ມີຄ່າໃຊ້ຈ່າຍຫຍັງ ນອກຈາກຄ່າເດີນທາງເທົ່ານັ້ນ. ແຮງງານເພດຍິງທີ່ໄປເຮັດວຽກຢູ່ປະເທດໄທ ມັກໃຊ້ຊ່ອງທາງນີ້ເພາະວ່າມັນເປີດໂອກາດໃຫ້ເຂົາເຈົ້າໄດ້ພົບປະກັບພີ່ນ້ອງ[110]. ຊ່ອງທາງດັ່ງກ່າວນີ້ມີປະໂຫຍດສະເພາະແຕ່ກັບແຮງງານທີ່ເຮັດວຽກຢູ່ໃກ້ກັບຊາຍແດນເທົ່ານັ້ນ.

ສະຫຼຸບແລ້ວ, ຊ່ອງທາງນອກລະບົບແມ່ນໄດ້ຮັບຄວາມນິຍົມຫຼາຍກວ່າແຕ່ກໍ່ມີຄວາມສ່ຽງໃນບາງກໍລະນີ.

## *ສະຫຼຸບຫຍໍ້:*

*ໃນປະຈຸບັນ, ຊ່ອງທາງໂອນເງິນທີ່ເປັນທາງການແມ່ນບໍ່ໄດ້ຈັດຕັ້ງຂຶ້ນມາເພື່ອຮັບໃຊ້ການໂອນເງິນໃນຈຳນວນໜ້ອຍແຕ່ຫຼາຍໆຄັ້ງ. ຊ່ອງທາງດັ່ງກ່າວນີ້ ຍັງປິດບໍລິການສຳລັບແຮງງານທີ່ເດີນທາງໄປເຮັດວຽກແບບຜິດກົດໝາຍ. ເພາະສະນັ້ນ, ການໂອນເງິນຈຶ່ງໂອນຜ່ານຊ່ອງທາງທີ່ບໍ່ເປັນທາງການຄືກັນກັບວິທີການເຄື່ອນຍ້າຍແຮງງານ. ຊ່ອງທາງເຫຼົ່ານີ້ມີຕົ້ນທຶນຕໍ່າກວ່າ, ໄວກວ່າ ແລະ ງ່າຍກວ່າສຳລັບຜູ້ນຳໃຊ້ທີ່ເປັນຄົນທ້ອງຖິ່ນ. ເຖິງຢ່າງໃດກໍ່ຕາມ, ວິທີທາງໂອນເງິນກັບບ້ານຄືແນວນັ້ນ ກໍ່ຍັງມີຄວາມສ່ຽງຫຼາຍຢ່າງທີ່ແຮງງານ ແລະ ຄອບຄົວຂອງເຂົາເຈົ້າຈະຕ້ອງໄດ້ຮັບ. ຄຳຖາມກໍ່ມີຢູ່ວ່າ: ມີຄວາມເປັນໄປໄດ້ບໍ່ ທີ່ຈະເຮັດໃຫ້ບາງຊ່ອງທາງທີ່ບໍ່ເປັນທາງການນັ້ນຖືກຕ້ອງຕາມກົດໝາຍ? ຖ້າຫາກເປັນໄປໄດ້ກໍ່ຈະເຮັດໃຫ້ຊ່ອງທາງເຫຼົ່ານັ້ນເຂົ້າມາຢູ່ພາຍໃຕ້ກອບລະບຽບການໃດໜຶ່ງ. ສະຫຼຸບແລ້ວ, ເຫັນວ່າມີຄວາມຈຳເປັນທີ່ຈະຕ້ອງຄົ້ນຄວ້າຊອກຫາທາງເລືອກໃໝ່ໆ ແລະ ມີຄ່າໃຊ້ຈ່າຍບໍ່ແພງໃນການໂອນເງິນກັບບ້ານໃຫ້ແກ່ແຮງງານລາວທີ່ໄປເຮັດວຽກຢູ່ປະເທດໄທ.*

## ການນຳໃຊ້ແຮງງານລາວທີ່ກັບຈາກການໄປເຮັດວຽກຢູ່ປະເທດໄທ

ແຮງງານລາວທີ່ໄປເຮັດວຽກຢູ່ປະເທດໄທ ແມ່ນອອກໄປດ້ວຍຄວາມຫວັງ ແລະ ກັບມາພ້ອມກັບລາຍຮັບທີ່ມີຄ່າ. ເຂົາເຈົ້າເອງກໍ່ແມ່ນບຸກຄົນທີ່ມີຄ່າຂອງລາວເໝືອນກັນ[111]. ໃນຫຼາຍປະເທດ, ລາຍຮັບຂອງແຮງງານປະເພດນີ້ໄດ້ຊ່ວຍຫຼຸດຊ່ອງຫວ່າງລະຫວ່າງການນຳເຂົ້າ ແລະ ການສົ່ງອອກຢ່າງຫຼວງຫຼາຍ[112]. ຍ້ອນແນວນັ້ນ, ຫຼາຍປະເທດ ກໍ່ໄດ້ໃຫ້ສິດທິພິເສດແກ່ແຮງງານເຫຼົ່ານີ້ ເພື່ອເຕົ້າໂຮມເອົາເຂົາເຈົ້າກັບຄືນສູ່ຕະຫຼາດແຮງງານໃນປະເທດຂອງຕົນໃຫ້ມີປະສິດທິຜົນ. ສປປ ລາວ ເຮົາກໍ່ຄວນມີນະໂຍບາຍດຶງດູດ ແລະ ເຕົ້າໂຮມເອົາເຂົາເຈົ້າກັບຄືນສູ່ຕະຫຼາດແຮງງານຂອງລາວໃຫ້ມີປະສິດທິຜົນ.

### ສະຖານະພາບຂອງແຮງງານທີ່ເຄີຍອອກໄປເຮັດວຽກຢູ່ປະເທດໄທ

ແຮງງານລາວໄປເຮັດວຽກຢູ່ປະເທດໄທທີ່ບໍ່ໄດ້ຈົດທະບຽນຢູ່ປະເທດລາວກ່ອນນັ້ນ ໂດຍລະບຽບການແລ້ວຖືວ່າເປັນການລະເມີດລະບຽບການກ່ຽວກັບການເຂົ້າ-ອອກເມືອງຂອງປະເທດ. ເພາະສະນັ້ນ, ມີບາງກໍລະນີ ເຂົາເຈົ້າກໍ່ຖືກປັບໃໝ ແລະ ໄດ້ຮັບການສຶກສາອົບຮົມຢູ່ລາວ[113]. ການປະຕິບັດຄືແນວນີ້ຍັງເກີດຂຶ້ນໃນບາງທ້ອງຖິ່ນເທົ່ານັ້ນ ຊຶ່ງມັນໄດ້ສະທ້ອນໃຫ້ເຫັນເຖິງສະພາບຄວາມຜິດປົກກະຕິ ແລະ ການຂາດຄວາມຍຸຕິທຳ ໂດຍທີ່ມີບາງກຸ່ມຄົນໄດ້ສວຍໃຊ້ອຳນາດເຂົາເຈົ້າ ຖືກກ່າວຫາວ່າ ເປັນຜູ້ກະທຳຜິດຕໍ່ກົດໝາຍໃນປະເທດ ໃນຂະນະທີ່ຢູ່ໄທ ຊຶ່ງແມ່ນບ່ອນທີ່ເຂົາເຈົ້າເປັນຜູ້ລະເມີດກົດໝາຍແທ້ໆ ໂດຍການລັກລອບເຂົ້າເມືອງໄທ ແບບບໍ່ຖືກຕ້ອງຕາມກົດໝາຍ, ແຮງງານເຫຼົ່ານີ້ຈຳນວນຫຼວງຫຼາຍ ຊ້ຳພັດໄດ້ຮັບໃບອະນຸຍາດຈາກທາງການໄທໃຫ້ຢູ່ເຮັດວຽກໃນໄທໄດ້. ການປະຕິບັດຄືແນວນີ້ຕໍ່ແຮງງານລາວ ທີ່ເອີ້ນວ່າຜິດກົດໝາຍນັ້ນແມ່ນຮຽກຮ້ອງໃຫ້ທາງການລາວພິຈາລະນາແກ້ໄຂໃຫ້ຖືກຕ້ອງ ເພາະວ່ານອກຈາກເຂົາເຈົ້າຈະບໍ່ໄດ້ກະທຳຫຍັງຜິດຢູ່ໃນລາວແລ້ວ, ເຂົາເຈົ້າຊ້ຳພັດຍັງໄດ້ນຳເອົາເງິນຕາຕ່າງປະເທດ ອັນມີຄ່າຈຳນວນມະຫາສານ ແລະ ທັກສະສີມືແຮງງານ ພ້ອມດ້ວຍຄວາມສາມາດໃນການດຳເນີນທຸລະກິດຈາກຕ່າງປະເທດເຂົ້າມາລາວ. ໃນລະດັບໜຶ່ງອີກ, ເນື່ອງຈາກວ່າແຮງງານເຫຼົ່ານັ້ນ ຕ້ອງຢູ່ຫ່າງໄກຈາກຄອບຄົວ, ບາງຄົນກໍ່ເກີດມີຂໍ້ຂັດແຍ້ງກັບຄູ່ຜົວເມຍ, ເກີດ ການຢ່າຮ້າງ ແລະ ຄວາມບາດໝາງໃນຄອບຄົວ ຫຼື ຊຸມຊົນ (ກ່ອງ 5.14 ແລະ 5.15). ແຮງງານແມ່ຍິງບາງຄົນໄດ້ສ້າງຄວາມສຳພັນແບບສ່ວນຕົວຢູ່ປະເທດໄທ ແລະ ມີບາງກໍລະນີ, ເຂົາເຈົ້າຍັງມີຄອບຄົວຈາກຄວາມສຳພັນດັ່ງກ່າວ. ເຂົາເຈົ້າບໍ່ຖືກຍອມຮັບງ່າຍປານໃດ ຈາກຄອບຄົວ

110 ແຫຼ່ງຂໍ້ມູນ: ILO (2007).

111 Amjad (1990); ARENA (1992).

112 Besley ແລະ Cord (2007).

113 ແຮງງານສ່ວນໃຫຍ່ຕ້ອງໄດ້ຈ່າຍຄ່າປັບໃໝ. ບໍ່ມີລະບົບການຈ່າຍຄ່າປັບໃໝທີ່ເປັນເອກະພາບກັນ; ຈຳນວນທີ່ຈ່າຍແມ່ນແຕກຕ່າງກັນໄປຕາມແຕ່ລະເຂດ ແລະ ຜູ້ເກັບ. ໃນບາງບ້ານ, ຄ່າປັບໃໝອາດສາມາດຕໍ່ລອງໄດ້ ຊຶ່ງເຮັດໃຫ້ເກີດຊ່ອງຫວ່າງການສໍ້ລາດບັງຫຼວງ. ຄ່າປັບໃໝແມ່ນມີຕັ້ງແຕ່ 50,000 ກີບ ຫາ 750,000 ກີບ. ໃນກໍລະນີທີ່ແຕກຕ່າງກັນ, ການລົງໂທດອາດລວມເຖິງການໃຫ້ບໍລິການແກ່ຊຸມຊົນ ແລະ ການຈຳກັດການເຄື່ອນຍ້າຍ ຊຶ່ງເອີ້ນກັນວ່າ ຄຸກເປີດ (Chanthavysouck 2006; NERI 2008).

**ກ່ອງ 5.16: ກໍລະນີຕ່າງໆໃນການຖ່າຍທອດທັກສະສີມືແຮງງານ**

1. ຢູ່ບ້ານນາອ້ອຍໜູ, ແຂວງບໍລິຄຳໄຊ, ແຮງງານລາວທີ່ໄປເຮັດວຽກຢູ່ປະເທດໄທ ສ່ວນໃຫຍ່ແມ່ນຜູ້ຊາຍ, ຊຶ່ງສ່ວນໃຫຍ່ກໍ່ແມ່ນເຮັດວຽກການກໍ່ສ້າງ. ໃນສອງສາມປີທີ່ຜ່ານມາ, ແຮງງານເຫຼົ່ານັ້ນບາງຄົນເຫັນໂອກາດໃນການນຳໃຊ້ທັກສະສີມືຂອງຕົນໃນເວລາກັບຄືນມາລາວ. ໃນປະຈຸບັນນີ້, ເຂົາເຈົ້າໄດ້ລິເລີ່ມ ເຮັດວຽກກໍ່ສ້າງຢູ່ໃນບ້ານອື່ນ ແລະ ໃນເວລາດຽວກັນນັ້ນເຂົາເຈົ້າກໍ່ໄດ້ຖ່າຍທອດຄວາມຮູ້ ແລະ ທັກສະສີມື ຕ່າງໆໃຫ້ແກ່ແຮງງານຢູ່ໃນບ້ານໃກ້ຄຽງ. ແຮງງານມີທັກສະສີມືທີ່ກັບຄືນມາລາວ ໃນແຕ່ລະໄລຍະ ໄດ້ຮ່ວມກັນຈັດຕັ້ງເປັນໜ່ວຍງານກໍ່ສ້າງຂຶ້ນມາ. ເຂົາເຈົ້າຍັງໄດ້ເຮັດວຽກກໍ່ສ້າງເຮືອນ ແລະ ຮັບໂຄງການກໍ່ສ້າງຕ່າງໆຢູ່ບ້ານຕ່າງໆໃນເມືອງນາກາຍແຂວງຄຳມ່ວນ. ແຮງງານສີມືດີຜູ້ໜຶ່ງທີ່ກັບມາຈາກປະເທດໄທ (ຊຶ່ງບໍ່ໄດ້ບອກຊື່) ເວົ້າວ່າການລິເລີ່ມດັ່ງກ່າວນັ້ນ ນອກຈາກຈະເຮັດໃຫ້ລາວມີໂອກາດສ້າງລາຍຮັບແລ້ວກໍ່ຍັງເປັນການຮຽນຮູ້ທັກສະສີມືຕ່າງໆນຳອີກ. ດັ່ງນັ້ນ, ການເຂົ້າຮ່ວມກັບໂຄງການນີ້ ຊ່ວຍໃຫ້ລາວໄດ້ເສີມສ້າງ 'ລະດັບຄວາມສາມາດຢ່າງຖາວອນ', ແລະ ຍັງເຮັດໃຫ້ຜູ້ທີ່ເຂົ້າຮ່ວມມີລາຍຮັບໃນໄລຍະເວລາບັ້ນທ້າຍຊີວິດການເຮັດວຽກຂອງເຂົາເຈົ້າ.

2. ທ້າວ ທະນົງສັກ ບ້ານເມືອງຮາມ, ແຂວງໄຊຍະບູລີ ໄປເຮັດວຽກຢູ່ປະເທດໄທເມື່ອລາວຫາກໍ່ໄດ້ 15 ປີ ແລະ ບໍ່ມີທັກສະສີມືຫຍັງ. ລາວເຮັດວຽກຢູ່ເຂດກໍ່ສ້າງ. ວຽກທີ່ລາວເຮັດ ແມ່ນເລີ່ມຕົ້ນຕັ້ງແຕ່ວຽກທາສີເສົາເຮືອນແບບງ່າຍໆ (ໃນຕອນທຳອິດກໍ່ໄດ້ຄ່າຈ້າງຖືກໆ) ຈົນຮອດວຽກປູນ ຊຶ່ງເປັນວຽກທີ່ຕ້ອງໃຊ້ທັກສະສີມືຫຼາຍຂຶ້ນ (ໃນຄ່າຈ້າງທີ່ດີກວ່າ). ຫຼັງຈາກເຮັດວຽກໄດ້ 5 ປີ ຢູ່ເຂດກໍ່ສ້າງແລ້ວ ລາວກໍ່ເດີນທາງກັບຄືນບ້ານ. ໃນປະຈຸບັນນີ້, ລາວນຳໃຊ້ທັກສະເຫຼົ່ານັ້ນຫາລາຍຮັບໃຫ້ໄດ້ຫຼາຍກວ່າເກົ່າ. ຍ້ອນວຽກຂອງລາວມີຄຸນນະພາບດີ, ຊື່ສຽງຂອງລາວກໍ່ໄດ້ໂດ່ງດັງໄປເຖິງບ້ານອື່ນໆ ຊຶ່ງເຮັດໃຫ້ລາວໄດ້ໂຄງການໃນບ້ານໃກ້ຄຽງຫຼາຍຂຶ້ນຄືກັນກັບຢູ່ບ່ອນອື່ນໆໃນແຂວງ.

3. ນາງ ໝອນ (ຢູ່ບ້ານນາອ້ອຍໜູ ເຊັ່ນດຽວກັນ) ໄປເຮັດວຽກໃນສວນປູກຕົ້ນຢາງຢູ່ປະເທດໄທໃນປີ 2005. ລາວໄດ້ຮຽນຮູ້ເຕັກນິກ ຕ່າງໆທີ່ກ່ຽວຂ້ອງກັບການປູກຕົ້ນຢາງ, ການກ້າເບ້ຍໄມ້, ການປາດ ແລະ ກ່ອງເອົາຢາງໄມ້. ຫຼັງຈາກເຮັດວຽກຢູ່ປະເທດໄທມາໄດ້ 3 ປີ, ລາວກໍ່ມີເງິນເປັນກອບເປັນກຳ (ໃນລະດັບທ້ອງຖິ່ນ) ແລະ ຍັງໄດ້ຮຽນຮູ້ທັກສະສີມືຕ່າງໆທີ່ກ່ຽວຂ້ອງນຳອີກ. ນາງ ໝອນ ກັບຄືນມາລາວໃນປີ 2008 ແລະ ປະຈຸບັນນີ້ກໍ່ເຮັດວຽກຢູ່ສວນຢາງໃກ້ໆກັບບ້ານທີ່ມີນັກລົງທຶນຍີ່ປຸ່ນເປັນເຈົ້າຂອງ. ນາງ ໝອນ ຍັງມີສວນກ້າເບ້ຍຢາງຢູ່ບ້ານ ຊຶ່ງລາວໄດ້ກ້າເພື່ອສະໜອງຕົ້ນຢາງນ້ອຍໃຫ້ແກ່ຜູ້ປູກຄົນຍີ່ປຸ່ນ.

***ແຫຼ່ງຂໍ້ມູນ:*** *ສະຖາບັນຄົ້ນຄວ້າເສດຖະກິດແຫ່ງຊາດ (2008).*

ແລະ ບ້ານຢູ່ລາວຂອງເຂົາເຈົ້າ. ນອກຈາກນີ້ກໍ່ຍັງມີແຮງງານຈຳນວນໜຶ່ງຕິດຢາເສບຕິດ ແລະ ມີບັນຫາໃນການກັບຄືນມາປະເທດ. ເຖິງຢ່າງໃດກໍ່ຕາມ, ໂດຍລວມແລ້ວ ບ້ານຕ່າງໆສ່ວນໃຫຍ່ຕ່າງກໍ່ມີຄວາມຍິນດີຕ້ອນຮັບການກັບມາຂອງແຮງງານເຫຼົ່ານັ້ນຍ້ອນວ່າເຂົາເຈົ້າໄດ້ປະກອບສ່ວນເຂົ້າໃນການພັດທະນາເສດຖະກິດຂອງບ້ານ ແລະ ປັບປຸງຊຸມຊົນ ແລະ ທັງປະກອບສ່ວນຢ່າງຈິງໃຈເຂົ້າໃນການສ້າງສາພັດທະນາໂຮງຮຽນ ແລະ ພື້ນຖານໂຄງລ່າງອື່ນໆໃນທ້ອງຖິ່ນຂອງເຂົາເຈົ້າ.

## ການບໍລິການ ແລະ ຊ່ອງຫວ່າງທີ່ມີ

ໃນປະຈຸບັນ, ໂຄງການທີ່ກ່ຽວຂ້ອງກັບ ການເຕົ້າໂຮມຄືນບັນດາແຮງງານທີ່ກັບຄືນ ຈາກການໄປເຮັດວຽກຢູ່ປະເທດໄທ ສ່ວນໃຫຍ່ແມ່ນເຮັດວຽກເພື່ອແກ້ໄຂບັນຫາຂອງຜູ້ທີ່ຖືກເຄາະຮ້າຍ ຈາກການຄ້າແຮງງານເຖື່ອນເທົ່ານັ້ນ. ລັດຖະບານລາວ ມີສູນນ້ອຍຢູ່ສອງແຫ່ງ ເພື່ອຮັບຕ້ອນຜູ້ທີ່ຖືກເຄາະຮ້າຍຈາກການຄ້າແຮງງານທີ່ກັບຄືນມາ. ສູນດັ່ງກ່າວ ໄດ້ປະສານກັບອົງການສາກົນວ່າດ້ວຍແຮງງານເຄື່ອນຍ້າຍ (ຫຼື ທີ່ເອີ້ນເປັນພາສາອັງກິດວ່າ IOM) ເພື່ອໃຫ້ການຊ່ວຍເຫຼືອ ແລະ ເຕົ້າໂຮມຜູ້ທີ່ໄດ້ຮັບເຄາະຮ້າຍທີ່ກັບຄືນມາ[114].ສະຫະພັນແມ່ຍິງລາວ ກໍ່ໄດ້ສ້າງ ຕັ້ງສູນໃຫ້ການບໍລິການທາງນິຕິກຳ, ດ້ານການປິ່ນປົວສຸຂະພາບ ແລະ ໃຫ້ຄຳປຶກສາແກ່ແຮງງານທີ່ຖືກຫຼອກລວງໄປຂາຍ. ອົງການຊ່ວຍເຫຼືອແມ່ຍິງທີ່ຖືກເຄາະຮ້າຍຈາກການຄ້າມະນຸດ (*Agir Pour Les Femmes en Situation Precaire*) ຊຶ່ງແມ່ນອົງການທີ່ບໍ່ສັງກັດລັດຖະບານໄດ້ເປີດສູນຟື້ນຟູຂຶ້ນ ຢູ່ແຂວງວຽງຈັນ ໂດຍສົມທົບກັບກະຊວງແຮງງານ ແລະ ສະຫວັດດີການສັງຄົມ. ສູນດັ່ງກ່າວໃຫ້ການປິ່ນປົວທັງທາງດ້ານຮ່າງກາຍ ແລະ ຈິດໃຈ ແລະ ສະໜອງການຝຶກອົບຮົມກ່ຽວກັບການສ້າງຕັ້ງ ແລະ ດຳເນີນທຸລະກິດຂະໜາດນ້ອຍລວມເຖິງ ການປ່ອຍທຶນສ້າງຕັ້ງທຸລະກິດ ໃຫ້ແກ່ກຸ່ມເປົ້າໝາຍເພື່ອຊ່ວຍເຫຼືອບັນດາຜູ້ທີ່ຖືກເຄາະຮ້າຍ ຈາກການຄ້າມະນຸດ ໃຫ້ສາມາດກັບມາສູ່ສັງຄົມລາວໄດ້ຢ່າງໝັ້ນຄົງທາງດ້ານເສດຖະກິດ ແລະ ດ້ານຈິດໃຈ[115]. ໂຄງການລິເລີ່ມຂອງອົງການແຮງງານສາກົນ ILO (ກ່ຽວກັບການຄ້າເດັກນ້ອຍ ແລະ ແມ່ຍິງ) ໄດ້ໃຫ້ການສະໜັບສະໜູນຫຼາຍຢ່າງ ໃນເຂດພາກພື້ນທີ່ມີສະພາບການຄ້າມະນຸດສູງ. ແຂວງເປົ້າໝາຍແມ່ນຄຳມ່ວນ, ສະຫວັນນະເຂດ, ຈຳປາສັກ, ບໍລິຄຳໄຊ ແລະ ໄຊຍະບູລີ. ໂຄງການໃຫ້ການສະໜັບສະໜູນທາງດ້ານການເງິນ ແລະ ການຝຶກອົບຮົມ ແກ່ຊຸມຊົນເປົ້າໝາຍໂດຍສົມທົບກັບ ກອງທຶນພັດທະນາບ້ານ. ການບໍລິການທາງດ້ານການເງິນເພື່ອຈັດສັນການເງິນໃໝ່ໃຫ້ກາຍເປັນລະບົບການຄ້າທີ່ໃຫຍ່ຂຶ້ນຊຶ່ງເປັນການສະໜອງໂອກາດໃນການດຳເນີນ

114 ການຄ້າມະນຸດ, http://www.humantrafficking.org/countries/lao_pdr , -ແກ້ໄຂວັນທີ 28 ກໍລະກົດ, 2008.
115 http://www.Afesip.org

**ກ່ອງ 5.17: ການກັບມາຄືນຂອງແຮງງານລາວ ເພື່ອສ້າງເສດຖະກິດ ແລະ ຄວາມຍືນຍົງ**

ນາງພິມ ແລະ ຜົວຂອງລາວ (ຢູ່ບ້ານປາກທວາຍ ແຂວງບໍລິຄຳໄຊ) ໄປເຮັດວຽກຢູ່ໄທໃນ ປີ 2003 ຕອນທີ່ລູກຂອງລາວໄດ້ 4 ເດືອນ. ເຂົາເຈົ້າທັງສອງຜົວເມຍໄດ້ອອກໄປເຮັດວຽກຍ້ອນວ່າມີຄວາມຫຍຸ້ງຍາກດ້ານການເງິນ ໂດຍສະເພາະ ຫຼັງຈາກທີ່ມີສະມາຊິກໃໝ່ເກີດຂຶ້ນມາ. ພາຍຫຼັງເກືອບ 3 ປີ ທີ່ເຮັດວຽກ ຢູ່ເຂດກໍ່ສ້າງໃນປະເທດໄທ, ທັງສອງຕັດສິນໃຈກັບຄືນມາລາວ ເພື່ອປັກຫຼັກຢູ່ບ້ານຂອງພວກເຂົາ. ສາມປີທີ່ເຮັດວຽກ ຢູ່ປະເທດໄທ ເຮັດໃຫ້ເຂົາເຈົ້າມີເງິນພໍ ທີ່ຈະປຸກເຮືອນໃໝ່ ແລະ ມີເງິນປະຢັດອີກປະມານ 250,000 ບາດ. ຫຼັງຈາກການກັບຄືນມາ, ເຂົາເຈົ້າໄດ້ລິເລີ່ມເຮັດສວນຄືນໃໝ່ແຕ່ວ່າກໍ່ຍັງໄດ້ເຮັດວຽກກໍ່ສ້າງໃນລະດູແລ້ງເພື່ອຫາລາຍຮັບເສີມ. ນາງພິມ ຍັງນຳໃຊ້ເງິນປະຢັດສ່ວນໜຶ່ງຊື້ລົດບັນທຸກຂະໜາດນ້ອຍ ແລະ ເຄື່ອງຈັກສີເຂົ້າຂະໜາດນ້ອຍ ເພື່ອໄວ້ໃຊ້ເອງ ແລະ ໃຫ້ບໍລິການເຊົ່າ. ປະຈຸບັນລາຍຮັບສະເລ່ຍຂອງສອງຜົວເມຍດັ່ງກ່າວ ແມ່ນມີປະມານ ສອງລ້ານກີບຕໍ່ເດືອນ. 'ພວກເຮົາບໍ່ມີແຜນທີ່ຈະກັບໄປປະເທດໄທອີກໃນອານາຄົດ, ເພາະວ່າລາຍຮັບຂອງພວກເຮົາພຽງພໍທີ່ຈະເຮັດໃຫ້ຄອບຄົວຢູ່ໄດ້. ພວກເຮົາຍັງບໍ່ຢາກໃຫ້ສະມາຊິກໃນຄອບຄົວໄປເຮັດວຽກຢູ່ປະເທດໄທ, ເຖິງວ່າຈະຜ່ານຕົວແທນຈັດຫາງານທີ່ຖືກກົດໝາຍກໍ່ຕາມ'.

ປະຈຸບັນ ນາງ ພິມ ມີອາຍຸ 36 ປີ ແລະ ຜົວຂອງລາວມີອາຍຸ 37 ປີ. ເຂົາເຈົ້າມີລູກນຳກັນສາມຄົນ.

***ແຫຼ່ງຂໍ້ມູນ:*** *ສະຖາບັນຄົ້ນຄວ້າເສດຖະກິດແຫ່ງຊາດ (2008).*

ທຸລະກິດໃຫ້ແກ່ແຮງງານທີ່ກັບຄືນມາ ຫຼື ການລິເລີ່ມອື່ນໆທີ່ຫຼາຍປະເທດໄດ້ໃຫ້ການຊ່ວຍເຫຼືອ ແກ່ແຮງງານຂອງຕົນທີ່ກັບຄືນມາ ກໍ່ຍັງບໍ່ທັນນຳມາປະຕິບັດໃຫ້ເປັນຮູບປະທຳໄດ້.

## ການນຳໃຊ້ເງິນທີ່ແຮງງານສົ່ງກັບບ້ານ ແລະ ທັກສະສີມືຕ່າງໆ[116]

ເກືອບວ່າໃນທຸກກໍລະນີ, ເງິນທີ່ໄດ້ມາແມ່ນໄດ້ນຳໄປໃຊ້ຈ່າຍເຂົ້າໃນສິ່ງຈຳເປັນຂອງຄອບຄົວຜູ້ຮັບເງິນ, ການສ້າງເຮືອນຊານ ແລະ ການສຶກສາ ແລະ ສຸກຂະພາບຂອງສະມາຊິກໃນຄອບຄົວ. ເງິນຈຳນວນໜຶ່ງ ກໍ່ຍັງນຳໄປບໍລິຈາກ ເພື່ອສາທາລະນະປະໂຫຍດ ເຊັ່ນ:ໂຮງຮຽນ ແລະ ວັດເປັນຕົ້ນ. ໃນບາງກໍລະນີ, ແຮງງານກໍ່ຊື້ທີ່ດິນແລະ ອຸປະກອນການຜະລິດກະສິກຳ. ຂໍ້ມູນກ່ຽວກັບການນຳໃຊ້ເງິນລົງທຶນ ເຂົ້າໃນກິດຈະກຳ ເສດຖະກິດນອກກະສິກຳ ແມ່ນມີຈຳນວນໜຶ່ງແຕ່ບໍ່ຫຼາຍ. ນອກຈາກນີ້, ພວກເຮົາຍັງຮູ້ໜ້ອຍຫຼາຍກ່ຽວກັບວິທີການທ້ອນເງິນຂອງປະຊາຊົນນອກຈາກທີ່ເຄີຍໄດ້ຍິນວ່າເອົາເງິນໄວ້ 'ໃນກ້ອງໝອນ'. ໃນສະພາບທີ່ມີການຂາດແຄນ ຊ່ອງທາງໃນການເກັບຮັກສາເງິນ ແລະ ນຳໃຊ້ເງິນຈຳນວນໜ້ອຍຂອງປະຊາຊົນ ຈຶ່ງຮຽກຮ້ອງໃຫ້ດຳເນີນ ການຢ່າງໃດຢ່າງໜຶ່ງເພື່ອຫາວິທີແກ້ໄຂ. ການສ້າງຕັ້ງກົນໄກທີ່ມີຮູບການຄືກັບສະຖາບັນຂຶ້ນມາ ເພື່ອອຳນວຍຄວາມສະດວກ ໃຫ້ແກ່ປະຊາຊົນຝາກເງິນຂອງເຂົາເຈົ້າອາດຈະເປັນວິທີການທີ່ສາມາດຊ່ວຍແກ້ໄຂບັນຫານີ້ໄດ້. ກຸ່ມທ້ອນເງິນຂອງບ້ານ ແລະ ສະຫະກອນສິນເຊື່ອກໍ່ແມ່ນ ໜຶ່ງໃນແຫຼ່ງຝາກເງິນ ດັ່ງກ່າວ ແຕ່ວ່າຈະຕ້ອງຍົກລະດັບຄວາມສາມາດ ແລະ ເຮັດໃຫ້ກຸ່ມການຈັດຕັ້ງດັ່ງກ່າວມີສະຖານະພາບດ້ານການເງິນ ທີ່ເປັນລະບົບເພື່ອໃຫ້ກຸ່ມ ແລະ ສະຫະກອນດັ່ງກ່າວ ສາມາດໃຫ້ບໍລິການດ້ານການລະດົມເງິນຝາກປະຢັດ.

ແຮງງານຮັບຈ້າງຫຼາຍຄົນ ທີ່ໄດ້ຮຽນຮູ້ທັກສະສີມືໃນເວລາເຂົາເຈົ້າເຮັດວຽກຢູ່ຕ່າງແດນນັ້ນ ໄດ້ນຳໃຊ້ເງິນປະຢັດສ່ວນໜຶ່ງຂອງພວກເຂົາເຈົ້າເຂົ້າໃນການລົງທຶນດຳເນີນທຸລະກິດ ທີ່ເຂົາເຈົ້າສາມາດນຳໃຊ້ ທັກສະສີມືເຫຼົ່ານັ້ນໄດ້ ເຊັ່ນ: ເປີດຮ້ານຂາຍເຄື່ອງຍ່ອຍ,ຮ້ານຕັດຜົມ, ຮ້ານແປງເຄື່ອງຈັກ, ຮັບຕັດຫຍິບ ແລະ ອື່ນໆ (ກ່ອງ 5.16 ແລະ 5.17). ເຖິງຢ່າງໃດກໍ່ຕາມ, ຖ້າເບິ່ງໂດຍລວມແລ້ວຈະເຫັນວ່າ ຜົນປະໂຫຍດຂອງເງິນທີ່ແຮງງານ ເຫຼົ່ານັ້ນສົ່ງກັບບ້ານແມ່ນມີຈຳກັດສະເພາະຕໍ່ບາງກິດຈະກຳ ແລະ ບາງທ້ອງຖິ່ນເທົ່ານັ້ນ. ການຂາດແຄນພື້ນຖານໂຄງລ່າງ ເຊັ່ນ: ໄຟຟ້າ, ຖະໜົນຫົນທາງ, ການຂົນສົ່ງ ແລະ ອື່ນໆ ຍັງເປັນອຸປະສັກຕໍ່ການລົງທຶນຂອງເຂົາເຈົ້າ. ເຫດຜົນດຽວກັນ, ແຮງງານຫຼາຍຄົນເສຍທັກສະສີມືຍ້ອນບໍ່ໄດ້ຝຶກຊ້ອມ ແລະ ຫັນກັບໄປສູ່ການຜະລິດກະສິກຳແບບກຸ້ມຕົນເອງ. ຖ້າເບິ່ງບົດຮຽນ ຂອງປະເທດອື່ນຈະເຫັນວ່າ ບາງປະເທດໄດ້ສະໜອງທີ່ດິນ ແລະ ສິ່ງອຳນວຍຄວາມສະດວກຕ່າງໆ ໃຫ້ແກ່ແຮງງານທີ່ເຄີຍໄປເຮັດວຽກຢູ່ຕ່າງປະເທດ ເພື່ອໃຫ້ເຂົາເຈົ້າ ສາມາດຕັ້ງທຸລະກິດ ໄດ້ພ້ອມທັງໃຫ້ການຍົກເວັ້ນພາສີຊົ່ວຄາວ. ການປະຕິບັດນະໂຍບາຍ ຄືແນວນີ້, ນອກຈາກ ຈະເປັນການຊ່ວຍເຫຼືອເຂົາເຈົ້າແລ້ວ ກໍ່ຍັງເປັນການຊຸກຍູ້ສົ່ງເສີມໃຫ້ເຂົາເຈົ້າ ຮັກສາເງິນຂອງຕົນເອງເປັນສະກຸນພາຍໃນແທນທີ່ຈະເປັນເງິນຕາຕ່າງປະເທດ[117]. ບາງບົດຮຽນເຫຼົ່ານີ້ສາມາດນຳມາສຶກສາລາຍລະອຽດ ແລະ ປະຕິບັດທົດລອງໄດ້. ກ່ອງ 5.8 ອະທິບາຍໃຫ້ເຫັນວິທີການທີ່ສູນແຫ່ງໜຶ່ງຢູ່ ປະເທດຟີລິປິນຊ່ວຍແຮງງານທີ່ກັບຄືນປະເທດຂອງເຂົາເຈົ້າ.

ເຖິງຢ່າງໃດກໍ່ຕາມ, ຍັງເປັນທີ່ເຊື່ອກັນຢູ່ວ່າການໃຊ້ຈ່າຍເຂົ້າໃນການບໍລິໂພກມີຜົນທັງທາງກົງ ແລະ ທາງອ້ອມຕໍ່ຄຸນນະພາບຊີວິດຂອງຄອບຄົວແຮງງານ ທີ່ໄປເຮັດວຽກຢູ່ຕ່າງປະເທດ ເຊັ່ນ: ແວດລ້ອມການເປັນຢູ່ດີຂຶ້ນ ແລະ ອາຫານການກິນທີ່ດີເຮັດໃຫ້ມີສຸຂະພາບດີຂຶ້ນ ຊຶ່ງສົ່ງຜົນໃຫ້ມີຜະລິດຕະພາບແຮງງານ, ເງິນປະຢັດ ແລະ ເງິນລົງທຶນເພີ່ມຫຼາຍຂຶ້ນ[118]. ການມີລົດຈັກ ຫຼື ລົດບັນທຸກຂະໜາດນ້ອຍຊ່ວຍໃຫ້ປະຢັດເວລາ ແລະ ເຮັດໃຫ້ການຂົນສົ່ງມີລາຄາຖືກ ແລະ ວ່ອງໄວຂຶ້ນ, ດັ່ງນັ້ນຈຶ່ງເປັນການສ້າງເງື່ອນໄຂເອື້ອອຳນວຍໃຫ້ຄົນງານ ມີໂອກາດເຮັດວຽກທີ່ມີຜະລິດຕະພາບສູງຂຶ້ນ. ຊາວກະສິກອນທີ່ນຳໃຊ້ວິທີການຜະລິດກະສິກຳແບບທັນສະໄໝ ສາມາດເພີ່ມລາຍຮັບຂອງຕົນ ຊຶ່ງມີຜົນດີຫຼາຍດ້ານໃຫ້ແກ່ເຂົາເຈົ້າ. ການໃຊ້ຈ່າຍເຂົ້າ ໃນການສຶກສາ ແລະ ສຸຂະພາບກໍ່ແມ່ນການລົງທຶນໃຫ້ແກ່ອານາຄົດ.

116 ILO (2007); NERI, 2006; ຈັນທະວີສຸກ (2006), NERI (2008).

117 ການຖືເງິນກີບຊ່ວຍໃຫ້ການປະຕິບັດນະໂຍບາຍເງິນຕາມີປະສິດທິຜົນ. ກົງກັນຂ້າມ, ຖ້າທຸກການຊຳລະສະສາງຫາກເຮັດເປັນເງິນຕາຕ່າງປະເທດ, ລັດຖະບານກໍ່ຈະມີເຄື່ອງມືໃນການຄຸ້ມຄອງເງິນເຟີ້ ແລະ ເງິນຝືດໜ້ອຍ.

118 ທະນາຄານໂລກ (2006); ຈັນທະວີສຸກ (2006).

## ກ່ອງ 5.18: ບາງຕົວຢ່າງ: ສູນເຕົ້າໂຮມແຫ່ງຊາດສຳລັບແຮງງານຕ່າງດ້າວຊາວຟີລິປິນ

ສູນເຕົ້າໂຮມແຫ່ງຊາດສຳລັບແຮງງານຕ່າງດ້າວຊາວຟີລິປິນ ແມ່ນ 'ຮ້ານຄົບວົງຈອນ' ສຳລັບແຜນງານການເຕົ້າໂຮມ ແລະ ບໍລິການຂອງລັດຖະບານ. ແຜນງານ ແລະ ການບໍລິການອັນນີ້ແມ່ນກົມແຮງງານ ແລະ ການຈ້າງງານເປັນຜູ້ຈັດຕັ້ງຂຶ້ນມາເພື່ອແກ້ໄຂບັນຫາຕ່າງໆຂອງແຮງງານທີ່ໄປເຮັດວຽກຢູ່ຕ່າງປະເທດ ແລະ ການພັດທະນາໂດຍສະເພາະ ບັນຫາທີ່ກ່ຽວຂ້ອງກັບສະພາບສະໝອງໄຫຼ ແລະ ຕົ້ນທຶນທາງສັງຄົມຂອງການເຮັດວຽກຢູ່ນອກປະເທດ. ການເຂົ້າມາເຕົ້າໂຮມກັນແຕ່ລະເທື່ອ, ບໍ່ວ່າຈະແມ່ນທາງດ້ານບຸກຄົນ, ຊຸມຊົນ ແລະ ເສດຖະກິດກໍ່ດີລ້ວນແຕ່ໄດ້ຮັບການຊ່ວຍເຫຼືອແກ້ໄຂຈາກອົງການຈັດຕັ້ງທີ່ກ່ຽວຂ້ອງຂອງສູນຊຶ່ງຄຸ້ມຄອງໂດຍຜູ້ຊ່ຽວຊານ.

ຕະຫຼອດໄລຍະຫຼາຍປີຜ່ານມາ, ແຮງງານຕ່າງດ້າວຊາວຟີລິປິນ ('OFW') ໄດ້ເຮັດວຽກຄືກັນກັບແຮງງານຊົ່ວຄາວທີ່ຖືກເຊີນມາ. ຫຼາຍຄົນກໍ່ຍັງພົບກັບຄວາມຍຸ້ງຍາກໃນການກັບມາຄືນມາຕັ້ງຖິ່ນຖານຢູ່ຟີລິປິນ. ເຖິງແມ່ນວ່າບາງຄົນສາມາດສ້າງຄວາມໂດດເດັ່ນໃຫ້ແກ່ຕົນເອງ ແລະ ປະກອບສ່ວນເຂົ້າໃນການພັດທະນາປະເທດກໍ່ຕາມແຕ່ໃນນັ້ນກໍ່ບໍ່ແມ່ນວ່າທຸກຄົນຈະມີໂອກາດ ແລະ ເງື່ອນໄຂດີໃນການຕັ້ງຫຼັກປັກຖານ.

ສູນເຕົ້າໂຮມແຫ່ງຊາດສຳລັບແຮງງານຕ່າງດ້າວຊາວຟີລິປິນ ເຮັດວຽກເພື່ອໃຫ້ໄດ້ປະໂຫຍດສູງສຸດຈາກວຽກ ເຮັດງານທຳຢູ່ຕ່າງປະເທດໃຫ້ແກ່ແຮງງານ, ຄອບຄົວຂອງເຂົາເຈົ້າ, ຊຸມຊົນ ແລະ ປະເທດຊາດ. ຈາກການຊ່ວຍເຫຼືອຂອງສູນດັ່ງກ່າວມັນໄດ້ເຮັດໃຫ້ການຈັດສັນນຳໃຊ້ຊັບສິນຕ່າງໆ, ທັກສະ ແລະ ຄວາມເຜື່ອແຜ່ຂອງເຂົາເຈົ້າຕໍ່ຊຸມຊົນໄດ້ຮັບການປັບປຸງດີຂຶ້ນ. ສູນລວມດັ່ງກ່າວປຽບເໝືອນຮ້ານຄ້າຄົບວົງຈອນ ແລະ ເຄືອຂ່າຍຂອງການໃຫ້ບໍລິການເຕົ້າໂຮມແຮງງານຕ່າງດ້າວຊາວຟີລິປິນ.

ເປົ້າໝາຍຫຼັກສາມດ້ານຂອງແຜນງານ ແລະ ການບໍລິການເຕົ້າໂຮມຂອງສູນແມ່ນ: ບຸກຄົນ, ຊຸມຊົນ ແລະ ເສດຖະກິດ.

**ໜ່ວຍງານເຕົ້າໂຮມບຸກຄົນ**

ໜ່ວຍງານນີ້ ຊ່ວຍໃຫ້ແຮງງານຕ່າງດ້າວຟີລິປິນທີ່ກັບຄືນມາປັບຕົວເຂົ້າກັບການດຳລົງຊີວິດຢູ່ໃນປະເທດຟີລິປິນ ໂດຍໝູນໃຊ້ປະສົບການ ແລະ ຄວາມຮູ້ຂອງເຂົາເຈົ້າໃຫ້ເກີດປະໂຫຍດ. ເຂົາເຈົ້າໄດ້ຮັບການຊ່ວຍເຫຼືອໃນດ້ານການຊອກວຽກເຮັດງານທຳຢູ່ພາຍໃນ ແລະ ຕ່າງປະເທດ; ການຊ່ວຍເຫຼືອທາງດ້ານເຕັກນິກສຳລັບ ການປະກອບອາຊີບອິດສະຫຼະ ຫຼື ການດຳເນີນທຸລະກິດ; ການເຂົ້າເຖິງສິນເຊື່ອ ຫຼື ການເງິນຈຸລະພາກ; ການປະເມີນຄວາມຕ້ອງການຝຶກອົບຮົມດ້ານເຕັກນິກເພີ່ມຕື່ມ; ການໃຫ້ຄຳປຶກສາດ້ານທຸລະກິດ ຫຼື ລະບົບເງິນຝາກປະຢັດ; ແລະ ການໃຫ້ຄຳປຶກສາດ້ານຈິດຕະສາດໃຫ້ແກ່ບຸກຄົນ ຫຼື ຄອບຄົວທີ່ມີບັນຫາ ແລະ ສິ່ງທ້າທາຍຕ່າງໆ.

**ໜ່ວຍງານເຕົ້າໂຮມຊຸມຊົນ**

ໜ່ວຍງານນີ້ໃຫ້ໂອກາດແກ່ແຮງງານຕ່າງດ້າວຟີລິປິນ ໃນການຊ່ວຍເລັ່ງຄວາມກ້າວໜ້າຂອງຊຸມຊົນຂອງເຂົາເຈົ້າ. ສິ່ງດັ່ງກ່າວນີ້ ສາມາດເຮັດໄດ້ໂດຍການສົມທົບກັບອົງການຈັດຕັ້ງອື່ນໆຂອງລັດຖະບານ ໂດຍສະເພາະກົມທ່ອງທ່ຽວ, ເຈົ້າໜ້າທີ່ຈັດຫາງານຟີລິປິນ ແລະ ສະມາຄົມແຮງງານຕ່າງດ້າວຟີລິປິນ.ນອກຈາກນີ້, ຍັງມີການຊ່ວຍເຫຼືອຈາກອົງການທີ່ບໍ່ແມ່ນລັດຖະບານ ເພື່ອໃຫ້ການສົ່ງເສີມສະໜັບສະໜູນ ແກ່ແຮງງານຕ່າງດ້າວຟີລິປິນ ຜູ້ທີ່ກັບຄືນປະເທດແລະ ຜູ້ທີ່ຍັງຢູ່ຕ່າງປະເທດ ໃຫ້ສາມາດແບ່ງປັນ ແລະ ປະກອບສ່ວນຄວາມຊຳນິຊຳນານ, ທັກສະ ແລະ ທຶນຮອນຂອງເຂົາເຈົ້າເຂົ້າກັບຊຸມຊົນ ຫຼື ໜ່ວຍງານຂອງລັດຖະບານທ້ອງຖິ່ນໃນການພັດທະນາວິສາຫະກິດຂະໜາດນ້ອຍ ແລະ ຂະໜາດກາງ ແລະ/ຫຼື ໂຄງການຊຸມຊົນທີ່ມີຜົນສູງ. ການເປັນພາຄີກັບອົງການທີ່ບໍ່ແມ່ນລັດຖະບານ ແມ່ນໄດ້ຮັບການສົ່ງເສີມຢ່າງດີ ເພື່ອສ້າງສາຍພົວພັນໃນການຮ່ວມມື ແລະ ການບໍລິການລະຫວ່າງແຮງງານຕ່າງດ້າວຟີລິປິນ ແລະ ຊຸມຊົນໃຫ້ຫຼາຍຂຶ້ນ.

**ໜ່ວຍງານເຕົ້າໂຮມທາງດ້ານເສດຖະກິດ**

ໜ່ວຍງານດັ່ງກ່າວນີ້ ມີເຄືອຂ່າຍພົວພັນກັບສະຖາບັນການເງິນ ແລະ ອົງການອື່ນໆ ເພື່ອກຳນົດ ຫຼື ພັດທະນາໂອກາດໃນການສ້າງຜູ້ປະກອບການ ຫຼື ໃນການລົງທຶນທີ່ຈະເຮັດໃຫ້ເກີດການປະຢັດ ແລະ ໄດ້ລາຍຮັບສູງຂຶ້ນໃຫ້ແກ່ແຮງງານຕ່າງດ້າວຟີລິປິນ. ສູນເຕົ້າໂຮມແບບດຽວກັນນີ້ໄດ້ຊອກຫາຜູ້ໃຫ້ບໍລິການທີ່ເປັນທ່າແຮງເພື່ອມາພັດທະນາ ແລະ ສະໜອງແຜນການບໍລິການໂອນເງິນທີ່ໄວ, ປອດໄພ ແລະ ມີຄ່າໃຊ້ຈ່າຍໜ້ອຍເພື່ອຈູງໃຈໃຫ້ແຮງງານຕ່າງດ້າວຟີລິປິນໂອນເງິນທຶນເຂົ້າມາຟີລິປິນ ໂດຍການນຳໃຊ້ຊ່ອງທາງທີ່ເປັນທາງການ. ໜ່ວຍງານນີ້ຍັງປະສານງານກັບສະຖາບັນການເງິນ ເພື່ອພັດທະນາກຸ່ມຫຼັກຊັບການລົງທຶນ ທີ່ຈະຊ່ວຍໃຫ້ເງິນທຶນປະຢັດຂອງແຮງງານຕ່າງດ້າວຟີລິປິນເຫຼົ່ານີ້ ເຕີບໃຫຍ່ຂະຫຍາຍໂຕ ຈົນສາມາດບັນລຸເປົ້າໝາຍໃດໜຶ່ງທີ່ແຮງງານເຫຼົ່ານີ້ໄດ້ຕັ້ງຄວາມຫວັງເອົາໄວ້ໃນອະນາຄົດເວລາເຂົາເຈົ້າກັບຄືນປະເທດ.

ສະຫຼຸບແລ້ວ, ການໃຫ້ບໍລິການຕ່າງໆທີ່ທາງສູນໄດ້ຕອບສະໜອງມີດັ່ງຕໍ່ໄປນີ້: ການຊ່ວຍຊອກວຽກເຮັດງານທຳ, ການພັດທະນາກ່ຽວກັບຄວາມເປັນຜູ້ປະກອບການ ແລະ ວິສາຫະກິດ, ການຊ່ວຍເຫຼືອດ້ານການຝຶກອົບຮົມ ແລະ ການຕັ້ງເຄື່ອງມືໃໝ່, ການໃຫ້ຄຳປຶກສາດ້ານຈິດຕະວິທະຍາ, ການລິເລີ່ມເສີມສ້າງປະໂຫຍດ ດ້ານມັນສະໝອງ, ການເຊື່ອມໂຍງຊຸມຊົນ ແລະ ອົງການທີ່ບໍ່ແມ່ນລັດຖະບານ, ແຜນງານບຳນານພິເສດ, ແຜນງານພິເສດກ່ຽວກັບການສົ່ງເງິນກັບບ້ານ, ຫຼັກຊັບການລົງທຶນ ແລະ ແຜນງານສະໜັບສະໜູນ ແລະ ຂໍ້ມູນຂ່າວສານຕ່າງໆ.

***ແຫຼ່ງຂໍ້ມູນ:*** *http://www.nrco.dole.gov.ph/*

## *ສະຫຼຸບຫຍໍ້:*

1. *ນະໂຍບາຍປະຈຸບັນ ໃນການເຕົ້າໂຮມແຮງງານ ທີ່ເຮັດວຽກຢູ່ປະເທດໄທ ກັບມາສູ່ສັງຄົມລາວ ແມ່ນແກ້ໄຂພຽງແຕ່ສະເພາະບັນຫາກ່ຽວກັບການຄ້າແຮງງານເຄື່ອນເປັນຕົ້ນຕໍ. ໃນປະຈຸບັນນີ້ ຍັງມີທີ່ແຮງງານເຫຼົ່ານັ້ນຫຼາຍໆ ໄດ້ກັບຄືນມາສູ່ສັງຄົມລາວບໍ່ວ່າຈະເປັນການກັບມາດ້ວຍຕົນເອງ ຫຼື ຜ່ານການຊ່ວຍເຫຼືອ ຂອງອົງການທີ່ບໍ່ແມ່ນລັດຖະບານ, ຊຶ່ງຕົວຢ່າງດັ່ງກ່າວຈະຊ່ວຍໃນການວາງນະໂຍບາຍເພື່ອກ້າວໄປສູ່ການເຕົ້າໂຮມການກັບຄືນມາຂອງເຂົາເຈົ້າ.*

2. *ຫຼາຍປະເທດໄດ້ນຳໃຊ້ວິທີການລະດົມເງິນປະຢັດຂະໜາດນ້ອຍ ແລະ ສ້າງໃຫ້ເປັນຄັງໃຫຍ່ ຊຶ່ງສາມາດນຳໄປລົງທຶນ, ປ່ອຍກູ້ ຫຼື ນຳໃຊ້ໃນທາງອື່ນເພື່ອພັດທະນາເສດຖະກິດໃຫ້ຂະຫຍາຍໂຕໄດ້ຢ່າງມີປະສິດທິຜົນ ແລະ ວິທີການດັ່ງກ່າວນີ້ອາດສາມາດນຳມາພູນໃຊ້ຢູ່ລາວໄດ້. ດັ່ງນັ້ນ, ຈຶ່ງຄວນສ້າງຕັ້ງຊ່ອງທາງການຝາກເງິນຂອງແຮງງານລາວທີ່ໄປເຮັດວຽກຢູ່ປະເທດໄທ. ກອງທຶນພັດທະນາບ້ານ ກໍ່ແມ່ນທາງເລືອກໜຶ່ງທີ່ຄວນຈະໄດ້ຮັບການຍົກລະດັບ ແລະ ສ້າງໃຫ້ກອງທຶນດັ່ງກ່າວມີລະດັບຄວາມສາມາດສູງຂຶ້ນ.*

## ຂໍ້ສະເໜີແນະຕົ້ນຕໍ

1. ໃນສະພາບທີ່ລາວເຮົາຍັງຂາດ ຫຼື ມີລະບົບກົນໄກການຈັດຕັ້ງໜ້ອຍກ່ຽວກັບ ຂໍ້ມູນຂ່າວສານ ດ້ານຕະຫຼາດແຮງງານ ເພື່ອຕອບສະໜອງໃຫ້ແກ່ແຮງງານຢູ່ໃນ 'ຂະແໜງທີ່ມີລາຍຮັບຕໍ່າ', ຈຶ່ງຈຳເປັນຕ້ອງປັບປຸງ ແລະ ສ້າງຕັ້ງລະບົບກົນໄກຂໍ້ມູນຂ່າວສານດ້ານຕະຫຼາດແຮງງານຂຶ້ນ. ກ່ອງ 5.1 ສະເໜີວິທີການທີ່ເປັນໄປໄດ້ສຳລັບ ສປປ ລາວ.

2. ການປັບປຸງຍົກລະດັບທັກສະສີມືແຮງງານຮອບດ້ານມີຄວາມສຳຄັນຫຼາຍໃນການເພີ່ມຄວາມສາມາດໃນ ການຈ້າງງານຂອງແຮງງານໃນວຽກ ທີ່ສາມາດສ້າງມູນຄ່າເພີ່ມໄດ້. ການຍົກລະດັບທັກສະ ໂດຍຜ່ານການສຶກສາຜູ້ໃຫຍ່ ແລະ ການສຶກສາວິຊາຊີບ ກໍ່ແມ່ນບາງວິທີການ ທີ່ມີປະໂຫຍດ (ເບິ່ງບົດທີ 6).

3.1. ເພື່ອສ້າງຄວາມເຂັ້ມແຂງໃຫ້ແກ່ການປະກອບອາຊີບອິດສະຫຼະຂະໜາດນ້ອຍ ໃຫ້ແກ່ຕົນເອງ, ຈຸດເລີ່ມຕົ້ນຕ້ອງໃຫ້ຄວາມຮັບຮູ້ໂດຍທາງກົດໝາຍວ່າການປະກອບອາຊີບອິດສະຫຼະໃນນາມທຸລະກິດສ່ວນບຸກຄົນ ເຖິງວ່າເຂົາເຈົ້າຈະດຳເນີນທຸລະກິດຄ້າຂາຍໂດຍບໍ່ມີທີ່ຢູ່ຖາວອນກໍ່ຕາມ. ການຈົດທະບຽນທຸລະກິດດັ່ງກ່າວຈະສ້າງໂອກາດເງື່ອນໄຂອັນດີໃຫ້ແກ່ການຈັດຕັ້ງດຳເນີນທຸລະກິດໃຫ້ເກີດປະໂຫຍດແກ່ເຂົາເຈົ້າເອງເຊັ່ນ: ການສ້າງສະມາຄົມ ເພື່ອນຳໃຊ້ຊັບພະຍາກອນຮ່ວມກັນຫຼື ການສະເໜີບັນຫາຕ່າງໆ ຂອງເຂົາເຈົ້າຕໍ່ອຳນາດການປົກຄອງທີ່ກ່ຽວຂ້ອງ. ການຮັບຮູ້ທາງດ້ານກົດໝາຍຄວນມາຈາກອຳນາດການປົກຄອງ ຫຼື ອົງກອນຫຼຽບເທົ່າທີ່ກ່ຽວຂ້ອງ. ສະຫະພັນກຳມະບານລາວ ແລະ ສະຫະພັນແມ່ຍິງລາວ ກໍ່ສາມາດເປັນອົງການຊ່ວຍອຳນວຍຄວາມສະດວກໃຫ້ແກ່ການສ້າງຕັ້ງສະມາຄົມເຫຼົ່ານັ້ນໄດ້.

3.2. ຄວາມໝັ້ນໃຈໃນດ້ານການຮັບຮູ້ຈາກກົດໝາຍຕໍ່ທຸລະກິດສ່ວນບຸກຄົນນີ້ມັນຮຽກຮ້ອງໃຫ້ເອົາໃຈໃສ່ເນັ້ນ ໜັກຕື່ມອີກ ເຖິງວ່າມັນຈະໄດ້ຖືກຍົກຂຶ້ນມາເວົ້າຊ້ຳແລ້ວຊ້ຳອີກໃນກອງປະຊຸມຕ່າງໆກໍ່ຕາມ. ນອກຈາກນີ້, ຂໍ້ສະເໜີແນະຫຼາຍດ້ານທີ່ໄດ້ກ່າວໄວ້ໃນບົດທີ 4 ກ່ຽວກັບວຽກນອກລະດູ ແລະ ວຽກທີ່ບໍ່ແມ່ນກະສິກຳ ກໍ່ຄວນນຳມາປະຕິບັດໃນເຂດຕົວເມືອງເຊັ່ນດຽວກັນ (ເຊັ່ນ: ຂໍ້ສະເໜີແນະທີ 1).

4.1. ຄວນພິຈາລະນາ ກວດສອບກ່ຽວກັບລະບົບປະກັນສັງຄົມຈຸລະພາກ ໂດຍສະເພາະການປະກັນດ້ານສຸຂະພາບເພາະວ່າມັນອາດຈະຊ່ວຍໃຫ້ທັງແຮງງານທີ່ປະກອບອາຊີບອິດສະຫຼະ ແລະ ແຮງງານຮັບຈ້າງສາມາດຮັບປະກັນຄ່າໃຊ້ຈ່າຍດ້ານສຸຂະພາບໃນເວລາທີ່ເຂົາເຈົ້າເຈັບເປັນ.

4.2. ແຮງງານຮັບຈ້າງ ຈະຕ້ອງມີສັນຍາແຮງງານ ເປັນລາຍລັກອັກສອນ. ສິ່ງດັ່ງກ່າວ ອາດຊ່ວຍຫຼຸດຜ່ອນ ການສູນເສຍວຽກງານຂອງເຂົາເຈົ້າໂດຍບໍ່ມີເຫດມີຜົນ ຫຼື ຍ້ອນຄວາມບໍ່ແນ່ນອນຂອງນາຍຈ້າງ ແລະ ທັງຊ່ວຍປົກປ້ອງເຂົາເຈົ້າຈາກການເຮັດວຽກ ເປັນເວລາດົນນານ ໃນສະພາບແວດລ້ອມບໍ່ດີ. ກະຊວງແຮງງານ ແລະ ສະຫວັດດີການສັງຄົມຄວນສົມທົບກັບ ສະຫະພັນກຳມະບານລາວ ແລະ ນາຍຈ້າງສ້າງຕັ້ງລະບົບກົນໄກ ໃດໜຶ່ງຂຶ້ນມາເພື່ອດຳເນີນການແກ້ໄຂບັນຫານີ້.

5. ຄວນຈັດຕັ້ງດຳເນີນການຄົ້ນຄວ້າທີ່ເປັນຕົວແທນໃຫ້ແກ່ຕະຫຼາດແຮງງານຢູ່ໃນຕົວເມືອງ ເພື່ອເຂົ້າໃຈເຖິງບັນຫາດ້ານຕ່າງໆທີ່ຈຳເປັນ ໃນການຊີ້ທິດທາງໃຫ້ແກ່ການສ້າງນະໂຍບາຍທີ່ແທດເໝາະກັບສະພາບຕົວຈິງໃຫ້ຫຼາຍຂຶ້ນ.

6. ເຖິງວ່າ ແຮງງານລາວສ່ວນໃຫຍ່ ທີ່ໄປເຮັດວຽກຢູ່ປະເທດໄທໄດ້ຈົດທະບຽນຢູ່ປະເທດໄທກໍ່ຕາມ ແຕ່ໃນຄວາມເປັນຈິງແລ້ວ ຖ້າອີງໃສ່ລະບຽບການຂອງລາວ ກໍ່ຖືວ່າ ແຮງງານເຫຼົ່ານີ້ສ່ວນຫຼາຍເປັນແຮງງານຜິດກົດໝາຍ. ສະນັ້ນ, ຕໍ່ກັບບັນຫານີ້ຈຶ່ງເຫັນຄວາມຈຳເປັນຮີບດ່ວນທີ່ຕ້ອງດຳເນີນການທົບທວນຄືນລະບຽບການຕ່າງໆ ກ່ຽວກັບແຮງງານທີ່ໄປເຮັດວຽກຢູ່ຕ່າງປະເທດ.

7. ເຖິງຈະມີຄວາມສ່ຽງກໍ່ຕາມ, ແຕ່ແຮງງານທີ່ໄປເຮັດວຽກຢູ່ປະເທດໄທໃນປະຈຸບັນ ກໍ່ນິຍົມກັນໃຊ້ຮູບແບບການເດີນທາງ ແລະ ການເຂົ້າຫາວຽກງານແບບບໍ່ເປັນທາງການ. ສະນັ້ນ, ຈຶ່ງຄວນພະຍາຍາມເອົາໃຈໃສ່ຫັນເອົາຊ່ອງທາງທີ່ບໍ່ເປັນທາງການເຫຼົ່ານັ້ນເຂົ້າສູ່ກອບກົດໝາຍເພື່ອເປັນການຮັບຮູ້ສະພາບຄວາມເປັນຈິງ. ການເຮັດແບບນີ້ ກໍ່ຍັງເປັນການດຶງເອົາບັນດານາຍໜ້າຕ່າງໆ ເຂົ້າມາຢູ່ໃນກອບຂອງລະບຽບການໄດ້ເຊັ່ນດຽວກັນ.

8. ໃນປະຈຸບັນນີ້, ການໂອນເງິນກັບບ້ານແມ່ນເຮັດຜ່ານຊ່ອງທາງບໍ່ເປັນທາງການ, ເພາະວ່າມີລາຄາຖືກກວ່າ, ໄວກວ່າ ແລະ ງ່າຍກວ່າ ສຳລັບຜູ້ໃຊ້ບໍລິການໃນຊຸມຊົນທ້ອງຖິ່ນ. ລັດຖະບານອາດພິຈາລະນາເລືອກ ເຮັດໃຫ້ຊ່ອງທາງເຫຼົ່ານີ້ເຂົ້າມາສູ່ລະບຽບການ. ການສ້າງຕັ້ງອົງການຕົວແທນເຫຼົ່ານີ້ຍັງສາມາດເປັນຫົນທາງ ເຮັດໃຫ້ເງິນເຂົ້າມາສູ່ລະບົບທະນາຄານໄດ້.

9. ການເຕົ້າໂຮມແຮງງານລາວທີ່ໄປເຮັດວຽກຢູ່ປະເທດໄທກັບຄືນມາສູ່ລະບົບເສດຖະກິດ ຂອງລາວເປັນສິ່ງທີ່ມີຄວາມສຳ

ຄັນຫຼາຍ. ໃນປະເທດອື່ນ, ເຂົາເຈົ້າປະຕິບັດນະໂຍບາຍໃຫ້ການຊ່ວຍເຫຼືອດ້ານສິ່ງອຳນວຍຄວາມສະດວກ ໃນການດຳເນີນທຸລະກິດຕ່າງໆ ແລະ ການຍົກເວັ້ນພາສີຊົ່ວຄາວໃຫ້ແກ່ແຮງງານກັບຄືນປະເທດ. ສຳລັບ ສປປ ລາວ ເຮົາແລ້ວ, ອຳນາດການປົກຄອງທີ່ກ່ຽວຂ້ອງກໍ່ຄວນສຶກສາຫາທາງເລືອກຕ່າງໆທີ່ເໝາະສົມ ແລະ ສາມາດນຳມາປະຕິບັດໃຫ້ເກີດຜົນໄດ້. ບາງທີກໍ່ອາດສາມາດຈັດຕັ້ງ "ຈຸດຊ່ວຍເຫຼືອ" ຂຶ້ນມາໂດຍແມ່ນສະຫະພັນແມ່ຍິງລາວ ແລະ ສະຫະພັນກຳມະບານລາວເປັນຜູ້ນຳພາເພື່ອໃຫ້ການຊ່ວຍການເຕົ້າໂຮມຄືນບັນດາແຮງງານທີ່ກັບຄືນຈາກການໄປເຮັດວຽກຢູ່ຕ່າງປະເທດ ແລະ ຄວນເອົາໃຈໃສ່ພິເສດຕໍ່ແຮງງານທີ່ມີທັກສະສີມືດີກັບຈາກການໄປເຮັດວຽກຢູ່ຕ່າງປະເທດ. ເພື່ອຮັບປະກັນໃນສິ່ງດັ່ງກ່າວນີ້, ຄວນຈັດຕັ້ງ ດຳເນີນການສຶກສາວິໄຈລະອຽດ ເພື່ອຊອກຫາວິທີການຕ່າງໆ ທີ່ຈະເຮັດໃຫ້ຜູ້ທີ່ກັບຄືນມາສາມາດສ້າງຜົນປະໂຫຍດສູງສຸດໃຫ້ແກ່ເຂົາເຈົ້າເອງ ແລະ ເສດຖະກິດທ້ອງຖິ່ນໄດ້.

10. ຄວນຜັນຂະຫຍາຍບົດບາດ ຂອງກອງທຶນພັດທະນາບ້ານໃຫ້ກາຍມາເປັນ ອົງການຕົວແທນ ທີ່ປະຊາຊົນສາມາດຝາກເງິນປະຢັດຂອງເຂົາເຈົ້າໄດ້. ການຮວບຮວມເອົາກອງທຶນເງິນຝາກປະຢັດຈຳນວນໜ້ອຍ ແລະ ເສີມຂະຫຍາຍເປັນແຫຼ່ງທຶນໃຫຍ່ (ສືບຕໍ່ສົ່ງເສີມ ໂດຍຜ່ານຮູບການສ້າງຕັ້ງເປັນສະຫະພັນຂອງກຸ່ມສັງຄົມຕ່າງໆ) ວິທີນີ້ໄດ້ຈັດຕັ້ງມາໃນຫຼາຍໆປະເທດ ແລະ ໄດ້ຮັບຜົນສຳເລັດມາແລ້ວ. ຈາກນັ້ນ, ກໍ່ນຳເອົາຊັບພະຍາກອນເຂົ້າສູ່ວົງຈອນໝູນວຽນເງິນທຶນຂະໜາດໃຫຍ່ຂຶ້ນ. ເພື່ອເລີ່ມຈັດຕັ້ງປະຕິບັດຮູບການດັ່ງກ່າວນີ້, ພວກເຮົາສາມາດນຳໄປປະຕິບັດທົດລອງໄດ້ໃນສອງສາມບ້ານກ່ອນ.

## ເອກະສານຊ້ອນທ້າຍ 5.1:
# ການສຳຫຼວດແຮງງານໃນຕົວເມືອງ

*ແຮງງານທີ່ປະກອບອາຊີບອິດສະຫຼະ* ແມ່ນຜູ້ທີ່ໃຊ້ເວລາສ່ວນໃຫຍ່ຂອງເຂົາເຈົ້າເຂົ້າໃນການສ້າງເສດຖະ ກິດຂອງຕົນເອງ ແລະ ມີລາຍຮັບຫຼາຍກວ່າເຄິ່ງໜຶ່ງຂອງລາຍຮັບທັງໝົດມາຈາກການເຮັດວຽກດັ່ງກ່າວ.

*ແຮງງານຮັບຈ້າງ* ແມ່ນຜູ້ທີ່ໃຊ້ເວລາສ່ວນໃຫຍ່ຂອງເຂົາເຈົ້າ ໃນການເຮັດວຽກເພື່ອແລກກັບເງິນຄ່າແຮງງານ ແລະ ມີລາຍຮັບຫຼາຍກວ່າເຄິ່ງໜຶ່ງຂອງລາຍຮັບທັງໝົດມາຈາກການເຮັດວຽກດັ່ງກ່າວ. ເຂົາເຈົ້າອາດເປັນໄດ້ທັງແຮງງານປະຈຳ (ທີ່ເຮັດວຽກຂ້ອນຂ້າງໃຊ້ເວລາດົນກວ່າ, ປະມານ 6 ເດືອນ ຫຼື ຫຼາຍກວ່ານັ້ນ ແລະ ໄດ້ຮັບຄ່າຈ້າງເປັນເງິນເດືອນ) ແລະ ແຮງງານທົ່ວໄປທີ່ບໍ່ປະຈຳ (ທີ່ເຮັດວຽກເປັນລາຍມື້, ລາຍອາທິດ ຫຼື ໄລຍະສັ້ນຕາມການຈັດສັນວຽກ ແລະ ໄດ້ຮັບຄ່າແຮງລາຍມື້).

ສະພາບລວມຂອງຂະໜາດກຸ່ມຕົວແທນແຮງງານສາມາດເບິ່ງໄດ້ຈາກ ຕາຕະລາງ A5.1.

**ຕາຕະລາງ A5.1: ກຸ່ມຕົວແທນໂດຍຫຍໍ້**

| | ເຮັດວຽກໃຫ້ແກ່ຕົນເອງ | | ຮັບຈ້າງ | | ລວມ | |
|---|---|---|---|---|---|---|
| **ຂະແໜງການ** | **ຊາຍ** | **ຍິງ** | **ຊາຍ** | **ຍິງ** | **ຊາຍ** | **ຍິງ** |
| ອຸດສາຫະກຳ | 40 | 121 | 133 | 142 | 173 | 263 |
| ບໍລິການ | 81 | 145 | 52 | 82 | 133 | 227 |
| ລວມ | 121 | 266 | 185 | 224 | 306 | 490 |

| | ເຮັດວຽກໃຫ້ແກ່ຕົນເອງ | | ຮັບຈ້າງ | | ລວມ | |
|---|---|---|---|---|---|---|
| **ການສຶກສາ** | **ຊາຍ** | **ຍິງ** | **ຊາຍ** | **ຍິງ** | **ຊາຍ** | **ຍິງ** |
| ຮອດ 5 ປີ | 37 | 92 | 59 | 95 | 96 | 187 |
| ຫຼາຍກວ່າ 5 ປີ | 84 | 174 | 126 | 129 | 210 | 303 |
| ລວມ | 121 | 266 | 185 | 224 | 306 | 490 |

ປະສົບການຈາກຫຼາຍໆປະເທດຊີ້ໃຫ້ເຫັນວ່າ ຕະຫຼາດແຮງງານປະຕິບັດກັບແຮງງານຕ່າງດ້າວແຕກຕ່າງກັນ ເພາະວ່າເຂົາເຈົ້າສ່ວນຫຼາຍແມ່ນມີປະສົບການເຮັດວຽກໜ້ອຍ, ມີຄວາມສາມາດຕໍ່ລອງຕ່ຳ ແລະ ມີການສະໜັບສະໜູນທາງດ້ານການຈັດຕັ້ງ/ຄອບຄົວໜ້ອຍກວ່າ. ເຖິງຢ່າງໃດກໍ່ຕາມ, ການສຶກສາດັ່ງກ່າວນີ້ແມ່ນພຽງໄລຍະສັ້ນເທົ່ານັ້ນ, ເວັ້ນເສຍແຕ່ຢູ່ບາງທ້ອງຖິ່ນທີ່ແຮງງານຕ່າງດ້າວຂຶ້ນກັບກຸ່ມສະເພາະໃດໜຶ່ງ (ຫຼືຫຼາຍກຸ່ມ) ແລະ ຕະຫຼາດແຮງງານ ແລະ/ຫຼື ສັງຄົມກໍ່ແມ່ນຖືກຈັດແບ່ງຕາມກຸ່ມຕ່າງໆເຫຼົ່ານັ້ນ. ແຮງງານທີ່ໄປເຮັດວຽກຢູ່ຕ່າງປະເທດໃນກຸ່ມຕົວແທນນີ້ ແມ່ນໝາຍເຖິງຜູ້ທີ່ເຂົ້າມາຢູ່ໃນເມືອງບໍ່ກາຍ 5 ປີ ນັບຈາກມື້ສຳຫຼວດໄປ, ເນື່ອງຈາກວ່າໃນເຂດຕົວເມືອງຂອງລາວເຮົາບໍ່ໄດ້ມີການຈັດແບ່ງປະເພດຕາມທີ່ໄດ້ກ່າວໄວ້ຂ້າງເທິງ, ແລະ ກໍ່ຍັງເຊື່ອວ່າພາຍໃນ 5 ປີເຂົາເຈົ້າຈະຮຽນຮູ້ກົນໄກຂອງຕະຫຼາດແຮງງານໃນຕົວເມືອງ ແລະ ເຂົ້າກັບຄົນອື່ນໄດ້. ກຸ່ມຕົວແທນນີ້ມີແຮງງານທີ່ໄປເຮັດວຽກຢູ່ຕ່າງປະເທດ 22.6%: ຍິງ 26.5% ແລະ ຊາຍ 20.2%. ແຮງງານຮັບຈ້າງມີ 85% ຂອງແຮງງານທີ່ໄປເຮັດວຽກຕ່າງປະເທດທັງໝົດ ແລະ 42% ຂອງແຮງງານທີ່ບໍ່ເຄີຍໄປເຮັດວຽກຕ່າງປະເທດ. ເຫັນວ່າແຮງງານເຫຼົ່ານັ້ນ ສາມາດໄດ້ວຽກເປັນແຮງງານຮັບຈ້າງງ່າຍກວ່າ; ສຳລັບການເຮັດວຽກໃຫ້ແກ່ຕົນເອງຈະຕ້ອງມີເງິນຕັ້ງຕົວ, ທຶນສຳລັບເຮັດວຽກ, ມີທີ່ດິນ/ສະຖານທີ່ເລີ່ມທຸລະກິດ, ມີທີ່ຢູ່ໃນຕົວເມືອງ ແລະ ອື່ນໆ ຊຶ່ງເຂົາເຈົ້າເຫັນວ່າເປັນການຍາກທີ່ຈະຊອກໄດ້. ເຖິງຢ່າງໃດກໍ່ຕາມ, ເຂົາເຈົ້າກໍ່ຢາກປະ ກອບອາຊີບອິດສະຫຼະຫຼາຍກວ່າເຮັດວຽກຮັບຈ້າງ.

## ເອກະສານຊ້ອນທ້າຍ 5.2:
# ການສຳຫຼວດພາກສະໜາມຂອງແຮງງານທີ່ໄປເຮັດວຽກຢູ່ປະເທດໄທ

ແຮງງານທີ່ໄປເຮັດວຽກຢູ່ປະເທດໄທ ແມ່ນຜູ້ທີ່ຂ້າມຊາຍແດນໄປປະເທດໄທເພື່ອຊອກວຽກເຮັດງານທຳ. ແຮງງານນັ້ນອາດຈະໄປໃນໄລຍະສັ້ນ (ປະມານສອງອາທິດ ຫຼື ໜຶ່ງເດືອນ ເຊັ່ນ: ໄປເພື່ອເກັບກ່ຽວພືດ), ຫຼື ໄປດົນປະມານໜຶ່ງປີ ຫຼື ອາດຫຼາຍປີ.

ຂໍ້ມູນເກັບກຳມາຈາກ 6 ບ້ານຂອງສາມແຂວງ, ໂດຍນຳໃຊ້ການໂອ້ລົມກັບກຸ່ມເປົ້າໝາຍ (ຊຶ່ງມີທັງໝົດ 36 ກຸ່ມເປົ້າໝາຍ). ນອກຈາກນີ້, ຍັງໄດ້ກະກຽມປະຫວັດດ້ານປະສົບການຂອງແຮງງານເປັນລາຍບຸກຄົນ. ການສຶກສາທັງໝົດແມ່ນປະຕິບັດຢູ່ລາວ; ໂດຍການໂອ້ລົມກັບແຮງງານທີ່ກັບຄືນມາ, ຜູ້ທີ່ລາພັກກັບມາ, ຄອບຄົວຂອງແຮງງານຢູ່ປະເທດໄທ ແລະ ອຳນາດການປົກຄອງຂອງລັດ.

ແຂວງຕ່າງໆທີ່ໄດ້ດຳເນີນການສຳຫຼວດລວມມີ: ບໍລິຄຳໄຊ, ໄຊຍະບູລີ ແລະ ຈຳປາສັກ. ແຂວງເຫຼົ່ານີ້ ມີຊາຍແດນຕິດຕໍ່ກັບປະເທດໄທ. ໃນແຕ່ລະແຂວງໄດ້ເລືອກເອົາສອງບ້ານ, ໃນນັ້ນ ໜຶ່ງບ້ານຢູ່ໃກ້ກັບຊາຍແດນ ແລະ ອີກໜຶ່ງບ້ານຢູ່ໄກຈາກຊາຍແດນ, ແຕ່ວ່າທັງສອງບ້ານນີ້ມີສະພາບທີ່ມີຄົນອອກໄປເຮັດວຽກຢູ່ປະເທດໄທສູງ. ຢູ່ ບໍລິຄຳໄຊ, ໄດ້ເລືອກເອົາບ້ານປາກຫວຍເໜືອ ເພາະວ່າ ບ້ານນີ້ຢູ່ໃກ້ກັບຊາຍແດນ ແລະ ບ້ານນາອ້ອຍໝູ ທີ່ຢູ່ໄກຈາກຊາຍແດນ. ຢູ່ ແຂວງໄຊຍະບູລີ, ໄດ້ເລືອກເອົາບ້ານເມືອງຮາມທີ່ຢູ່ໃກ້ກັບຊາຍແດນ ແລະ ບ້ານບົວບານ ທີ່ຢູ່ໄກຈາກຊາຍແດນ. ຢູ່ແຂວງຈຳປາສັກ, ໄດ້ເລືອກເອົາບ້ານດົງຍາງທີ່ຢູ່ໃກ້ຊາຍແດນ ແລະ ບ້ານແກ້ງເກຍທີ່ຢູ່ໄກອອກໄປ.

ກຸ່ມເປົ້າໝາຍໃນການໂອ້ລົມໃນແຕ່ລະບ້ານປະກອບມີ 6 ກຸ່ມ:

1. ກຸ່ມແຮງງານເພດຊາຍທີ່ກັບຄືນມາ,
2. ກຸ່ມແຮງງານແມ່ຍິງທີ່ກັບຄືນມາ,
3. ກຸ່ມຊາວໜຸ່ມ (ອາຍຸແຕ່ 15-22 ປີ), ບໍ່ເຄີຍໄປປະເທດໄທຈັກເທື່ອ (ແຕ່ເປັນກຸ່ມທີ່ມີຄວາມເປັນໄປໄດ້ທີ່ຈະໄປເຮັດວຽກຢູ່ປະເທດໄທ),
4. ກຸ່ມຄອບຄົວທີ່ມີສະມາຊິກຜູ້ດຽວ (ຫຼື ຫຼາຍຄົນ) ທີ່ເຄີຍເຮັດວຽກ/ກຳລັງເຮັດວຽກຢູ່ປະເທດໄທ,
5. ກຸ່ມຄອບຄົວທີ່ມີສະມາຊິກບໍ່ເຄີຍເຮັດວຽກ/ກຳລັງເຮັດວຽກຢູ່ປະເທດໄທ,
6. ກຸ່ມອຳນາດການປົກຄອງບ້ານ

ແຕ່ລະກຸ່ມປະກອບດ້ວຍຜູ້ໃຫ້ສຳພາດ 6-9 ຄົນ.

**ການສຳພາດ:**
ນອກນີ້ ກໍ່ຍັງໄດ້ມີການປຶກສາຫາລືແບບພ້າຕໍ່ໜ້າກັບ:

1. ບໍລິສັດຈັດຫາງານ 9 ແຫ່ງ,
2. ກົມສົ່ງເສີມວຽກເຮັດງານທຳ, ກະຊວງແຮງງານ ແລະ ສະຫວັດດີການສັງຄົມ,
3. ກະຊວງການຕ່າງປະເທດ,
4. UNIFEM ປະຈຳ ສປປ ລາວ; UNIAP ປະຈຳ ສປປ ລາວ,
5. ອົງການແຮງງານສາກົນ ຫຼື ILO, ຢູ່ປະເທດໄທ,
6. ສະພາພັດທະນາເສດຖະກິດ ແລະ ສັງຄົມແຫ່ງຊາດ, ປະເທດໄທ,
7. ສະຖາບັນຄົ້ນຄວ້າວິໄຈເພື່ອການພັດທະນາຂອງປະເທດໄທ (TDRI), ແລະ
8. ພະແນກແຮງງານ ແລະ ສະຫວັດດີການສັງຄົມຂັ້ນແຂວງ ແລະ ຂັ້ນເມືອງ ແລະ ກົມຕຳຫຼວດ ຂອງສາມແຂວງເປົ້າໝາຍ.

## ເອກະສານຊ້ອນທ້າຍ 5.3:
# ຕົວກຳນົດລາຍຮັບ

ວິທີການທີ່ເປັນທີ່ຮູ້ຈັກກັນດີ ໃນການຄາດຄະເນອັດຕາຜົນຕອບແທນຂອງການສຶກສາ ຍັງເປັນສູດທີ່ດີທີ່ສຸດເພື່ອໃຊ້ກຳນົດປັດໄຈຕ່າງໆ ທີ່ອະທິບາຍການປ່ຽນແປງຂອງລາຍຮັບ. ສົມຜົນດັ່ງກ່າວຊີ້ໃຫ້ເຫັນວ່າ ລາຍຮັບປ່ຽນແປງໄປຕາມລະດັບການສຶກສາ ແລະ ປະສົບການເຮັດວຽກ. ຕົວປ່ຽນທີ່ບໍ່ເອກະລາດແມ່ນໂລກາຣິດຂອງ 'ລາຍຮັບຕໍ່ເດືອນ'. ຈາກການສົນທະນາໃນບົດ, ຕົວປ່ຽນເອກະລາດໃນສົມຜົນນັ້ນປະກອບດ້ວຍ:

1. ການສະສົມດ້ານການສຶກສາ, ວັດແທກຈາກປີການສຶກສາທີ່ແຮງງານໄດ້ຮັບ (ລວມເຖິງການສຶກສາວິ ຊາຊີບ).
2. ປະສົບການທີ່ໃຊ້ຕົວປ່ຽນ 'ອາຍຸ' ເປັນຕົວແທນ (ໂດຍການຂຶ້ນກຳລັງສອງເພື່ອໃຫ້ສາມາດລວມເອົາສະພາບທີ່ບໍ່ເປັນເສັ້ນຊື່).
3. ດັ່ງທີ່ເຫັນໄດ້ຈາກບົດຜ່ານມາ, ການໄດ້ຮັບລາຍຮັບເປັນເດືອນ ແມ່ນແຕກຕ່າງຈາກລາຍຮັບເປັນຊົ່ວໂມງ. ດັ່ງນັ້ນ, ຈຳນວນຊົ່ວໂມງເຮັດວຽກຕໍ່ອາທິດຈຶ່ງຖືກກຳນົດໃຫ້ເປັນຕົວປ່ຽນ.
4. ຕະຫຼາດເຮັດໃຫ້ຄ່າຈ້າງມີຄວາມແຕກຕ່າງກັນ ຊຶ່ງຢ່າງໜ້ອຍສຸດກໍ່ແມ່ນອີງຕາມເພດ, ສະຖານະພາບແຮງງານທີ່ໄປເຮັດວຽກຢູ່ຕ່າງປະເທດ/ບໍ່ເຄີຍໄປເຮັດວຽກຢູ່ຕ່າງປະເທດ ແລະ ຂະແໜງການ (ອຸດສາຫະກຳ ແລະ ບໍລິການ). ດັ່ງນັ້ນ, ຕົວປ່ຽນສະແດງຈຸດຕັດກັນທີ່ຮ້ອງວ່າ ດຳມີ້ ຈຶ່ງໄດ້ຖືກໃຊ້ເຂົ້າໃນສົມຜົນເພື່ອເປັນຕົວແທນຂອງຄວາມແຕກຕ່າງຕາມສະພາບເຫຼົ່ານັ້ນ.

ການຄາດຄະເນໂດຍສົມຜົນເສັ້ນຊື່ແບບຫຼາຍຕົວປ່ຽນ ສຳລັບແຮງງານຮັບຈ້າງ ແມ່ນໄດ້ສະເໜີໃນຕາຕະລາງ A 5.2 ລຸ່ມນີ້. ປັດໄຈກຳນົດສຳຄັນສຳລັບແຮງງານທີ່ປະກອບອາຊີບອິດສະຫຼະແມ່ນ 'ການສະສົມທຶນ'. ເນື່ອງຈາກຂໍ້ມູນກ່ຽວກັບຕົວປ່ຽນນີ້ບໍ່ມີ, ຈຶ່ງບໍ່ໄດ້ມີການຄິດໄລ່.

**ຕາຕະລາງ A5.2: ຄາດຄະເນຄວາມສຳພັນເສັ້ນຊື່ຂອງປັດໄຈທີ່ມີຜົນຕໍ່ລາຍຮັບ (ສະເພາະແຮງງານ ຮັບຈ້າງເທົ່ານັ້ນ)**

| ຕົວປ່ຽນເອກະລາດ | ຄ່າສຳປະສິດ | ຄ່າທົດສອບ 't' |
|---|---|---|
| ການສະສົມດ້ານການສຶກສາ | 0.02 | 3.40** |
| ອາຍຸ | 0.09 | 3.79** |
| ອາຍຸກຳລັງສອງ | -0.01 | -2.88** |
| ຊົ່ວໂມງເຮັດວຽກ | 0.01 | 2.82** |
| Dummy (ບໍ່ໄປເຮັດວຽກຢູ່ຕ່າງປະເທດ=0) | -0.08 | -1.70* |
| Dummy (ແມ່ຍິງ=0) | 0.12 | 2.86** |
| Dummy (ຂະແໜງບໍລິການ=0) | -0.25 | -5.29** |
| ຄ່າຄົງທີ່ | 11.39 | 34.27** |

ຕົວປ່ຽນຕາມ: ໂລກາຣິດຂອງລາຍຮັບຕໍ່ເດືອນຂອງແຮງງານຮັບຈ້າງ; R2=0.24; F=18.03; n=409;
* * = ມີຄວາມສຳພັນທາງດ້ານສະຖິຕິໃນລະດັບຄວາມໝັ້ນໃຈ 1% ແລະ * = ມີຄວາມສຳພັນທາງດ້ານສະຖິຕິໃນລະດັບຄວາມໝັ້ນໃຈ 5%

ສົມຜົນດັ່ງກ່າວມີຄວາມໃກ້ຄຽງກັບຕົວເລກຈິງໃນລະດັບດີສົມຄວນ ໂດຍສຳປະສິດຂອງຕົວປ່ຽນອະທິບາຍ ຫຼື ຕົວປ່ຽນເອກະລາດ ທີ່ມີຄວາມໝາຍສຳຄັນທາງດ້ານສະຖິຕິໃນລະດັບທີ່ເຊື່ອຖືໄດ້ 5%. ດັ່ງນັ້ນ, ຕົວປ່ຽນເຫຼົ່ານັ້ນ ຈຶ່ງສາມາດອະທິບາຍການປ່ຽນແປງຂອງລາຍຮັບໄດ້ຢ່າງຖືກຕ້ອງແທ້. ເຖິງຢ່າງໃດກໍ່ຕາມ, ຂະໜາດຂອງສຳປະສິດທີ່ນ້ອຍ ຊີ້ໃຫ້ເຫັນວ່າການປ່ຽນແປງຂອງລາຍຮັບຍັງບໍ່ຫຼາຍ. ສິ່ງດັ່ງກ່າວນີ້ຍັງຢືນໄດ້ຈາກຄ່າສຳປະສິດຄວາມບໍ່ເທົ່າທຽມກັນທາງດ້ານລາຍຮັບ ຫຼື ຈີນີ ທີ່ມີພຽງ 0.24 ໃນກຸ່ມແຮງງານຮັບຈ້າງ. ການປ່ຽນແປງໜ້ອຍຂອງລາຍຮັບຊີ້ໃຫ້ເຫັນວ່າຕະຫຼາດຂ້ອນຂ້າງ 'ຮາບພຽງ'; ກໍ່ຄືການເໜັງຕີງຂອງລາຍຮັບມີບໍ່ຫຼາຍ.

# ບົດທີ 6:

## ການລົງທຶນສ້າງຄົນເພື່ອສ້າງຄວາມສາມາດໃນການປະກອບອາຊີບ ແລະ ທາງເລືອກທີ່ຫຼາກຫຼາຍໃຫ້ແກ່ແຮງງານ



ບົດທີ 6:

# ການລົງທຶນສ້າງຄົນເພື່ອສ້າງຄວາມສາມາດໃນການປະກອບອາຊີບ ແລະ ທາງເລືອກທີ່ຫຼາກຫຼາຍໃຫ້ແກ່ແຮງງານ

ປ່າໄມ້ທີ່ຂ້ອຍຕ້ອງເດີນທາງເຂົ້າໄປນັ້ນ ມີທັງຄວາມສວຍງາມ, ຄວາມມືດ ແລະ ຄວາມຕຶບໜາສະຫຼັບຊັບຊ້ອນ, ແຕ່ຂ້ອຍກໍ່ໃຫ້ຄຳໝັ້ນສັນຍາວ່າຈະປົກປັກຮັກສາມັນໄວ້... ແລະ ເສັ້ນທາງຍັງອີກຍາວໄກກ່ອນທີ່ຂ້ອຍ ຈະໄດ້ພັກຜ່ອນ.

Robert Frost
**ກາບກອນຂອງອາເມລິກາ (1874 -1963)**

## ສະພາບລວມ

ບົດທີ 6 ນີ້ ໄດ້ສະເໜີຂໍ້ຄິດເຫັນກ່ຽວກັບການເພີ່ມທະວີຄວາມເຂັ້ມແຂງໃຫ້ແກ່ທຶນມະນຸດເພື່ອປັບປຸງຄວາມອາດສາມາດໃນການປະກອບອາຊີບກໍ່ຄືການມີວຽກເຮັດງານທຳຂອງປະຊາຊົນ. ຜົນການສຶກສາວິໄຈບາງຈຸດ ແມ່ນໄດ້ອີງໃສ່ຜົນການສຳຫຼວດພາກສະໜາມຢູ່ໃນ ສປປ ລາວ ແລະ ນອກນັ້ນ ກໍ່ຍັງໄດ້ຍົກເອົາບາງບົດຮຽນ ແລະ ປະສົບການຜົນສຳເລັດຂອງປະເທດອື່ນຂຶ້ນມາສະເໜີໃຫ້ເຫັນນຳ.

ການສົ່ງເສີມການສຶກສາລະດັບປະຖົມຢ່າງມີປະສິດທິພາບໃນມື້ນີ້ ຈະເຮັດໃຫ້ມີວຽກເຮັດງານທຳທີ່ມີປະສິດທິຜົນສູງໃນທົດສະວັດຕໍ່ໜ້າ. ຜ່ານມາຫຼາຍປະເທດລວມທັງປະເທດທີ່ມີລາຍຮັບຕ່ຳ ໄດ້ຈັດຕັ້ງປະຕິບັດວິທີການ ທີ່ມີຫົວຄິດປະດິດສ້າງ ໂດຍຕິດພັນກັບສະພາບແວດລ້ອມແຕກຕ່າງກັນເພື່ອເພີ່ມອັດຕາການເຂົ້າຮຽນ ແລະ ອັດຕາລອດເຫຼືອໃນຊັ້ນປະຖົມສຶກສາ ໄປຄຽງຄູ່ກັນກັບການເພີ່ມຊັບພະຍາກອນຢ່າງມີຜົນສຳເລັດດີ. ວິທີການດັ່ງກ່າວລວມມີ ການສິດສອນຫ້ອງຄວບ, ການຈັດຕັ້ງກຸ່ມໂຮງຮຽນ, ຫ້ອງຮຽນບຳລຸງ, ການໃຫ້ອາຫານ ກາງເວັນແກ່ໂຮງຮຽນ, ຫ້ອງສະໝຸດເຄື່ອນທີ່ ແລະ ການມີສ່ວນຮ່ວມຂອງພາກເອກະຊົນໃນບາງດ້ານ. ເນື່ອງ ຈາກວ່າ ສປປ ລາວ ກໍ່ມີບັນຫາຄ້າຍຄືກັບບັນດາປະເທດທີ່ໄດ້ຮັບໝາກຜົນຈາກການນຳໃຊ້ວິທີການດັ່ງກ່າວນັ້ນ (ຄື ລັກສະນະພູມີປະເທດ, ປະຊາກອນທີ່ຫຼາກຫຼາຍຊົນເຜົ່າ, ພື້ນຖານໂຄງລ່າງທີ່ມີການພັດທະນາຕ່ຳ, ແລະ ອື່ນໆທີ່ຄ້າຍຄືກັນ). ດັ່ງນັ້ນ, ຈຶ່ງຄາດວ່າບາງວິທີການທີ່ໄດ້ກ່າວມານັ້ນອາດຈະສາມາດນຳມາປະຕິບັດ ທົດລອງໃຫ້ເກີດຜົນສຳເລັດຢູ່ລາວໄດ້.

ເມື່ອພິຈາລະນາຈາກທັດສະນະ ‘ເສດຖະກິດພູມປັນຍາ’ ໃນປະຈຸບັນນີ້ຈະເຫັນໄດ້ວ່າຍັງມີອີກຫຼາຍບັນຫາທີ່ກ່ຽວຂ້ອງກັບແຮງງານຄຸນນະພາບຕ່ຳຢູ່ລາວ. ລະບົບການສຶກສາເຕັກນິກວິຊາຊີບໃນປະຈຸບັນນີ້ ນອກຈາກຈະໄດ້ຮັບການກະທົບຈາກການສຶກສາທີ່ມີຄຸນນະພາບຕ່ຳ ແລະ ການຂາດເຂີນອຸປະກອນ ແລະ ພະນັກງານແລ້ວ, ກໍ່ຍັງໄດ້ພະຍາຍາມຕອບສະໜອງອາຊີບທີ່ແມ່ນໝາກຜົນຂອງລະບົບດັ່ງກ່າວບໍ່ສອດຄ່ອງກັບຄວາມຕ້ອງການແທ້ຈິງຂອງລູກຄ້າ ພາຍຫຼັງສຳເລັດການຮຽນແລ້ວ. ສິ່ງດັ່ງກ່າວນີ້, ມັນຮຽກຮ້ອງໃຫ້ດຳເນີນການແກ້ໄຂໃຫ້ຖືກຕ້ອງ. ບົດນີ້ຍັງໄດ້ສະເໜີໃຫ້ຕອບສະໜອງການຝຶກອົບຮົມໄລຍະສັ້ນ ແກ່ຜູ້ທີ່ມີລະດັບການສຶກສາ ແລະ ມີລາຍຮັບຕ່ຳໃນຂອບເຂດທົ່ວປະເທດ ໂດຍເລັ່ງໃສ່ການຝຶກອົບຮົມທາງພາກປະຕິບັດໄລຍະສັ້ນເພື່ອເຮັດໃຫ້ຊາວໜຸ່ມຊົນນະບົດຜູ້ທຸກຍາກຫັນປ່ຽນຈາກຂະແໜງກະສິກຳ ແລະ ຊ່ວຍເຫຼືອຊາວໜຸ່ມຕົວເມືອງໃນການຊອກຫາວຽກເຮັດງານທຳ ແລະ ສ້າງຄວາມເຂັ້ມແຂງໃຫ້ແກ່ຖານະຕຳແໜ່ງງານຂອງເຂົາເຈົ້າໃນຕະຫຼາດແຮງງານ. ການຝຶກອົບຮົມຄວນສະໜອງຄວາມຮູ້ ແລະ ທັກສະໃຫ້ແກ່ຜູ້ເຂົ້າຮັບການຝຶກອົບຮົມເພື່ອການປະກອບອາຊີບອິດສະຫຼະ ແລະ ວຽກງານຮັບຈ້າງ.

ນອກຈາກນີ້, ກໍ່ຍັງມີຄວາມຈຳເປັນທີ່ຈະຕ້ອງສ້າງຄວາມເຂັ້ມແຂງໃຫ້ແກ່ຫົວໜ່ວຍທຸລະກິດຈຸລະພາກ ແລະ ທຸລະກິດຂະໜາດນ້ອຍດ້ວຍການສະໜອງຄວາມຮູ້ ແລະ ເຕັກນິກຕ່າງໆ. ການໃຫ້ການບໍລິການດ້ານການ ພັດທະນາທຸລະກິດອາດສາມາດຊ່ວຍແກ້ໄຂບັນຫານີ້ໄດ້ ແລະ ຄາດວ່າຫົວໜ່ວຍທຸລະກິດຂະໜາດນ້ອຍຈຳນວນຫຼາຍຈະສາມາດຮັບພາລະເອົາເອງໄດ້, ແຕ່ໃນນັ້ນ ອາດຈະມີຫົວໜ່ວຍທຸລະກິດຈຸລະພາກຈຳນວນໜຶ່ງ ຕ້ອງການຄວາມຊ່ວຍເຫຼືອໃນໄລຍະເວລາໃດໜຶ່ງ (ຊຶ່ງແຕກຕ່າງກັບອຸດສາຫະກຳອ່ອນນ້ອຍ). ນອກຈາກນັ້ນ, ການພັດທະນາຊຸມຊົນ ກໍ່ຍັງສາມາດຊ່ວຍປັບປຸງແບບແຜນການດຳເນີນງານລວມໝູ່ ເພື່ອສ້າງຄວາມອາດສາມາດໃນການປະກອບອາຊີບ ກໍ່ຄື ການເຮັດວຽກງານໃຫ້ແກ່ແຮງງານທ້ອງຖິ່ນ.

ຕາມທັດສະນະລວມແລ້ວ, ຂະແໜງບໍ່ແຮ່ ແລະ ທໍລະນີວິທະຍາ ຈະກາຍເປັນກິດຈະກຳສຳຄັນຂອງປະເທດເຮົາໃນ 2-3 ທົດສະວັດຕໍ່ໜ້າ ແລະ ລາວເຮົາຄວນກວດກາຄຸ້ມຄອງແຫຼ່ງຊັບພະຍາກອນຢ່າງເຄັ່ງຄັດ. ເພາະສະນັ້ນ, ຈຶ່ງຈຳເປັນໃຫ້ມີສະຖາບັນການຈັດຕັ້ງທີ່ລົງເລິກສະເພາະກ່ຽວກັບຂະແໜງການນີ້.

ໃນອະນາຄົດຕໍ່ໜ້າ, ລັດຖະບານ ຈຳເປັນຕ້ອງເພີ່ມທະວີການລົງທຶນເຂົ້າໃນຂະແໜງການສຶກສາໃຫ້ຫຼາຍຂຶ້ນ ແລະ ນຳໃຊ້ວິທີການຕ່າງໆທີ່ຫຼາກຫຼາຍເພື່ອປັບປຸງການສຶກສາໃນທຸກລະດັບ.

## ຈຸດປະສົງ

ການພັດທະນາມະນຸດ ມີຄວາມໝາຍຕ່າງກັນກັບ ການພັດທະນາຊັບພະຍາກອນມະນຸດ. ການພັດທະນາຊັບພະຍາກອນມະນຸດ (HRD) ແມ່ນອົງປະກອບໜຶ່ງທີ່ສຳຄັນຂອງການພັດທະນາມະນຸດ (HD). ການພັດທະນາຊັບພະຍາກອນມະນຸດ (HRD) ຊ່ວຍສົ່ງເສີມການພັດທະນາມະນຸດຍ້ອນວ່າ ປະຊາຊົນຜູ້ທີ່ມີທັກສະສີມືແລະ ມີໂລກະທັດກວ້າງໄກຫຼາຍຂຶ້ນ ຈະມີຄວາມເຂັ້ມແຂງຫຼາຍຂຶ້ນ ແລະ ເຂົາເຈົ້າກໍ່ມີທາງເລືອກໃນດ້ານວຽກເຮັດງານທຳ ແລະດ້ານການດຳເນີນຊີວິດຫຼາຍກວ່າ. ກອບນະໂຍບາຍສົ່ງເສີມການພັດທະນາມະນຸດໂດຍຜ່ານການສ້າງວຽກເຮັດງານທຳ ແມ່ນຮຽກຮ້ອງໃຫ້ມີວິທີການຫຼາຍດ້ານ ຊຶ່ງດ້ານສຳຄັນທີ່ສຸດກໍ່ແມ່ນການປັບປຸງການພັດທະນາຊັບພະຍາກອນມະນຸດ ກໍ່ຄື ການພັດທະນາການສຶກສາ ແລະ ທຶນມະນຸດ.

**ບົດນີ້ສະເໜີວິທີການຕ່າງໆເພື່ອ:**

1. ສົ່ງເສີມການສຶກສາຂັ້ນພື້ນຖານ ເພື່ອຂະຫຍາຍຄວາມອາດສາມາດ ໃນການສ້າງວຽກເຮັດງານທຳໃຫ້ຫຼາຍຂຶ້ນ
2. ເສີມຂະຫຍາຍທັກສະສີມື ເພື່ອເຮັດໃຫ້ຄວາມອາດສາມາດ ໃນການສ້າງວຽກເຮັດງານທຳ ໃຫ້ໄດ້ດີກວ່າເກົ່າ ແລະ ເພື່ອດຸ່ນດ່ຽງຄວາມຕ້ອງການ ແລະ ການສະໜອງແຮງງານໃນຂະແໜງການຕ່າງໆຂອງຕະຫຼາດແຮງງານ
3. ສະໜອງການບໍລິການດ້ານການພັດທະນາທຸລະກິດເພື່ອຕອບສະໜອງ ແລະ ສົ່ງເສີມປັດໄຈດ້ານຄວາມຮູ້ ໃຫ້ແກ່ຫົວໜ່ວຍທຸລະກິດຂະໜາດນ້ອຍ ແລະ ຈຸລະພາກ, ແລະ
4. ສົ່ງເສີມທັກສະການພັດທະນາຊຸມຊົນສຳລັບການຈັດຕັ້ງປະຕິບັດແບບລວມໝູ່ເພື່ອການດຳລົງຊີວິດທີ່ດີຂຶ້ນ.

## ເປົ້າໝາຍເພື່ອບັນລຸການສຶກສາຊັ້ນປະຖົມແບບທົ່ວເຖິງ

ປະຊາຊົນສາມາດປັບປ່ຽນວິຖີການດຳລົງຊີວິດ (ແລະ ແບບແຜນຊີວິດ) ແບບດັ້ງເດີມ ແລະ ເລືອກເອົາອາຊີບທີ່ເຂົາເຈົ້າມັກຫາກເຂົາເຈົ້າມີທາງເລືອກໃນຕະຫຼາດແຮງງານ. ພື້ນຖານສຳລັບການສ້າງວຽກກະສິກຳນອກລະດູ ແລະ ວຽກທີ່ບໍ່ແມ່ນກະສິກຳ, ການສົ່ງເສີມການຜະລິດກະສິກຳແບບທັນສະໄໝທີ່ນຳໃຊ້ວິທະຍາສາດ, ແລະ ໂດຍທົ່ວໄປແລ້ວການຂະຫຍາຍຖານວຽກເຮັດງານທຳແມ່ນຂຶ້ນກັບຖານຄວາມຮູ້ທີ່ກວ້າງຂວາງ. ສະນັ້ນ, ການສຶກສາຊັ້ນປະຖົມຈຶ່ງແມ່ນປັດໄຈຂັ້ນພື້ນຖານທີ່ຕ້ອງສ້າງ. ຂໍ້ສະເໜີທີ່ມີລັກສະນະກວມລວມເພື່ອບັນລຸການສຶກສາແບບທົ່ວເຖິງນັ້ນແມ່ນໄດ້ກ່າວໄວ້ຢູ່ໃນ ບົດທີ 2 ໂດຍສະເພາະຂໍ້ສະເໜີກ່ຽວກັບການຍົກລະດັບ ຫຼື ຍົກລະດັບໂຮງຮຽນມູນລະປະຖົມມາເປັນໂຮງຮຽນປະຖົມສົມບູນ, ການປັບປຸງພື້ນຖານໂຄງລ່າງທີ່ຈຳເປັນ (ເຊັ່ນລະບົບນ້ຳສະອາດ, ສຸຂະອານາໄມ ແລະ ອື່ນໆ) ແລະ ເຮັດໃຫ້ການເຂົ້າໂຮງຮຽນລະບົບພາກບັງຄັບ ແບບບໍ່ໄດ້ເສຍຄ່າໃຫ້ປະກົດຜົນເປັນຈິງ. ດັ່ງນັ້ນ, ຂໍ້ສະເໜີເຫຼົ່ານີ້ ແມ່ນບໍ່ໄດ້ນຳມາເວົ້າຄືນອີກ. ແຕ່ກົງກັນຂ້າມ, ຂໍ້ສະເໜີທີ່ມີຫົວຄິດປະດິດສ້າງແມ່ນຈະໄດ້ອະທິບາຍເພີ່ມຕື່ມອີກ[119]. ຈຸດເລີ່ມຕົ້ນຂອງການສົ່ງເສີມການສຶກສາຊັ້ນປະຖົມກໍ່ຄືຍຸດທະສາດການປະຕິຮູບ ລະບົບການສຶກສາສະບັບໃໝ່ ປີ (2006-2015) ທີ່ໄດ້ສະເໜີໃຫ້ມີການຈັດຕັ້ງກຸ່ມໂຮງຮຽນ, ການສອນວິຊາຊີບໃນຊັ້ນປະຖົມ, ແລະ ການຂະຫຍາຍການສຶກສານອກ ໂຮງຮຽນສຳລັບຜູ້ໃຫຍ່ ຖືວ່າເປັນຍຸດທະສາດທີ່ກຳນົດຄາດໝາຍສູງຫຼາຍ. ຍຸດທະສາດນີ້ໄດ້ເອົາໃຈໃສ່ພິເສດຕໍ່ກັບບັນດາຊົນເຜົ່າ ແລະ ເຂດທີ່ຢູ່ອາໄສຂອງເຂົາເຈົ້າ. ບັນດາຂໍ້ສະເໜີເຫຼົ່ານີ້ຈະຕ້ອງໄດ້ຮັບການຈັດຕັ້ງປະຕິບັດ. ນອກຈາກນີ້, ກໍ່ຄວນນຳເອົາຂໍ້ສະເໜີລຸ່ມນີ້ໄປພິຈາລະນາຕື່ມ:

### ແກ້ໄຂບັນຫາການຂາດຄູ

ການຂາດຄູສອນ ໂດຍສະເພາະຢູ່ໂຮງຮຽນໃນເຂດຫ່າງໄກສອກຫຼີກ ແມ່ນເລື່ອງປົກກະຕິຢູ່ໃນປະເທດທີ່ມີປະຊາກອນໜ້ອຍ ແລະຢູ່ຢ່າງກະແຈກກະຈາຍ[120]. ເພື່ອແກ້ໄຂບັນຫານີ້, ການຈັດຕັ້ງສິດສອນຫ້ອງຄວບ ກໍ່ແມ່ນວິທີການໜຶ່ງທີ່ໄດ້ປະຕິບັດກັນຢ່າງກວ້າງຂວາງ ແລະ ໄດ້ຮັບໝາກຜົນດີ. ການສອນຫ້ອງຄວບນີ້ ແມ່ນວິທີການນຳໃຊ້ຄູໜຶ່ງຄົນສອນຫຼາຍກວ່າໜຶ່ງຊັ້ນຮຽນ ແລະ ຫຼາຍກວ່າໜຶ່ງວິຊາ ຊຶ່ງສ່ວນໃຫຍ່ແມ່ນຈັດຕັ້ງປະຕິບັດຄວບກັນໃນຫ້ອງຮຽນຫ້ອງດຽວ ແລະ ໃນເວລາດຽວກັນ. ຄາດວ່າຄູສອນຫ້ອງຄວບຈະສາມາດ 'ປະຕິບັດໄດ້ຫຼາຍວຽກໄປພ້ອມໆກັນ' (ໝາຍຄວາມວ່າສາມາດສອນໄດ້ຫຼາຍກວ່າໜຶ່ງຫົວຂໍ້ ແລະ ນັກຮຽນຫຼາຍຄົນໃນເວລາດຽວກັນ), ແຕ່ຄູສອນຫ້ອງຄວບເຫຼົ່ານີ້ຈະຕ້ອງໄດ້ຮັບການຝຶກອົບຮົມມາກ່ອນ[121]. ເຖິງຢ່າງໃດກໍ່ຕາມ, ວິທີການສອນຫ້ອງຄວບນີ້ບໍ່ແມ່ນເລື່ອງໃໝ່ສຳລັບລາວເຮົາ. ພ້ອມດຽວກັນນັ້ນ, ການສະໜອງການຝຶກອົບຮົມໃຫ້ແກ່ຄູ ກ່ຽວກັບການສອນຫ້ອງຄວບກໍ່ຍັງບໍ່ທັນພຽງພໍເທື່ອ. ເພື່ອເສີມຂະຫຍາຍການສິດສອນຫ້ອງຄວບໃຫ້ຫຼາຍຂຶ້ນ, ຄວນມີນະໂຍບາຍສະໜອງສິ່ງຈູງໃຈ ຢ່າງເໝາະສົມໃຫ້ແກ່ຄູສອນ ທີ່ຖືກມອບໝາຍໃຫ້ເຮັດໜ້າທີ່ນີ້ ເຊັ່ນ: ລາຍຮັບເພີ່ມພິເສດ, ການເລື່ອນຂັ້ນໄວ ແລະ ອື່ນໆ ສົມທົບກັບການຝຶກອົບຮົມເພີ່ມເຕີມ. ວິທີການນີ້ ກໍ່ໄດ້ລະບຸໄວ້ໃນແຜນຍຸດທະສາດການປະຕິຮູບການສຶກສາມາແລ້ວ.

ເພື່ອຊຸກຍູ້ສົ່ງເສີມການສອນຫ້ອງຄວບ, ໂຮງຮຽນຄວນນຳໃຊ້ຊາວໜຸ່ມທີ່ມີການສຶກສາຢູ່ໃນບ້ານເຂົ້າມາຊ່ວຍ ເຮັດໜ້າທີ່ຫຼາຍດ້ານໄດ້ເຊັ່ນ: ວຽກງານບໍລິຫານ, ການແປພາສາ (ໃນກໍລະນີທີ່ນັກຮຽນບໍ່ຮູ້ພາສາລາວ), ກວດບົດສອບເສັງ ແລະ ອື່ນໆ. ຊາວໜຸ່ມເຫຼົ່ານີ້ບໍ່ຈຳເປັນຕ້ອງແມ່ນຄູສອນທີ່ຜ່ານການຝຶກອົບຮົມ ຫຼື ບໍ່ຈົບມັດທະຍົມສົມບູນກໍ່ໄດ້. ພວກເຂົາອາດຈົບຫ້ອງ 7-8 ກໍ່ຄືຈົບຊັ້ນມັດທະຍົມຕອນຕົ້ນ, ແຕ່ເປັນຜູ້ມີຄວາມສາມາດໃນການຊ່ວຍເຫຼືອຄູສອນ.

119 ຂໍ້ສະເໜີແນະ ກ່ຽວກັບ ທິດທາງເພື່ອບັນລຸການສຶກສາທົ່ວໄປສ່ວນໃຫຍ່ ແມ່ນໄດ້ລະບຸໄວ້ໃນແຜນຍຸດທະສາດປະຕິຮູບການສຶກສາຊຶ່ງສາມາດເບິ່ງລາຍລະອຽດເພີ່ມເຕີມໃນ GOL (2008b) ແລະ ບົດລາຍງານຂອງທີມງານຕໍ່ການສຶກສາ.

120 ບັນຫານີ້ກໍ່ພົບເຫັນຢູ່ໃນປະເທດທີ່ພັດທະນາແລ້ວເຊັ່ນດຽວກັນ, ຊຶ່ງເປັນບ່ອນທີ່ມີອັດຕາການເກີດຫຼຸດລົງ ແລະ ມີຈຳນວນເດັກນ້ອຍມາເຂົ້າໂຮງຮຽນໃນບາງຂັ້ນຮຽນບໍ່ພຽງພໍທີ່ຈະຈ້າງຄູມາສອນເຕັມເວລາ. ເບິ່ງລາຍລະອຽດເພີ່ມເຕີມໄດ້ຈາກ Gayfer ແລະ Gajadharsingh (1991) ແລະ MulryanKyne (2007).

121 ເບິ່ງຕົວຢ່າງໄດ້ໃນ Quist (2005); http://www.teachercreated.com/



ການປະກອບອາຄານສະຖານທີ່ ແລະ ສິ່ງອຳນວຍຄວາມສະດວກ ທີ່ທັນສະໄໝໃຫ້ແກ່ການສຶກສາເປັນເງື່ອນໄຂຕົ້ນຕໍໜຶ່ງໃນການສ້າງທຶນມະນຸດ

ພວກເຂົາອາດຈະເຮັດວຽກນີ້ເປັນບາງເວລາ ແລະ ໄດ້ຮັບຄ່າຕອບແທນ ຫຼື ສິ່ງຈູງໃຈອື່ນໆໃນການເຮັດວຽກຂອງພວກເຂົາ.

ການສອນຫ້ອງຄວບ ແມ່ນວິທີການນຳໃຊ້ ສຳລັບໂຮງຮຽນທີ່ມີຈຳນວນພະນັກງານຄູບໍ່ພຽງພໍ. ວິທີການສິດສອນແບບນີ້ ຄວນຈະໄດ້ຮັບການຊຸກຍູ້ສົ່ງເສີມຈາກກຸ່ມໂຮງຮຽນເຊັ່ນດຽວກັນ (ໂຮງຮຽນຕັ້ງຢູ່ໃນໃຈກາງຂອງ 5-6 ບ້ານທີ່ໃຊ້ຊັບພະຍາກອນການຮຽນການສອນຮ່ວມກັນ, ໃນນັ້ນກໍ່ແມ່ນລວມທັງຄູສອນນຳ), ຊຶ່ງໃນນັ້ນ ຈະຕ້ອງໄດ້ຫ້າງຫາກະກຽມພາຫານະຮັບໃຊ້ໃນການຂົນສົ່ງ ເພື່ອເຮັດໃຫ້ການຮຽນການສອນມີປະສິດທິພາບທີ່ສູງຂຶ້ນ. ຂໍ້ສະເໜີນີ້ແມ່ນທາງເລືອກທີ່ດີທີ່ສຸດທີ່ຄວນນຳມາພິຈາລະນາຈັດຕັ້ງປະຕິບັດໃຫ້ເກີດຜົນດີ.

## ເພີ່ມອັດຕາການລອດເຫຼືອ

ເດັກນ້ອຍໃນ ສປປ ລາວ ມາຈາກພື້ນຖານເສດຖະກິດ-ສັງຄົມ ແລະ ວັດທະນະທຳແຕກຕ່າງກັນ. ເດັກນ້ອຍຫຼາຍຄົນທີ່ມີພື້ນຖານມາຈາກຄອບຄົວທີ່ຍຶດຖືການເອົາຜະລິດກະສິກຳເປັນຫຼັກ ມີຄວາມດ້ອຍທາງດ້ານທັກສະໃນການວິໄຈ ແລະ ການຄິດໄລ່. ບັນຫານີ້ຢູ່ໃນປະເທດອື່ນກໍ່ມີເຊັ່ນດຽວກັນໂດຍສະເພາະຢູ່ໃນກຸ່ມເດັກນ້ອຍຊົນເຜົ່າ ຫຼື ກຸ່ມເດັກນ້ອຍທີ່ມີພໍ່ແມ່ກຳພ້າສື. ບາດກ້າວໃນການແກ້ໄຂບັນຫາການສຶກສາເພື່ອຊ່ວຍເຫຼືອຄົນທີ່ມີຄວາມຫຍຸ້ງຍາກໃນການຮຽນໄດ້ຮັບການຈັດຕັ້ງປະຕິບັດກັນຢ່າງກວ້າງຂວາງເພື່ອແກ້ໄຂບັນຫານີ້[122].

ອົງປະກອບສຳຄັນຂອງແຜນການແກ້ໄຂບັນຫາການສຶກສາລວມມີດັ່ງລຸ່ມນີ້:

1. ຂັ້ນຕອນທຳອິດກໍ່ຄືການກຳນົດເອົານັກຮຽນເປົ້າໝາຍທີ່ຮຽນອ່ອນກວ່າໝູ່. ຄູສອນດຳເນີນການສອບເສັງພາກປາກເປົ່າສຳລັບນັກຮຽນທຸກຄົນໃນຫ້ອງ ປໍ 1-3 ລວມທັງນັກຮຽນຜູ້ທີ່ບໍ່ໄປໂຮງຮຽນ. ນັກຮຽນຄົນໃດທີ່ເສັງຕົກພາກປາກເປົ່າກໍ່ຈັດເປັນກຸ່ມເປົ້າໝາຍສຳລັບການສອນບຳລຸງຄືນ.

2. ບາດກ້າວຕໍ່ໄປແມ່ນວິທີການຈັດຕັ້ງປະຕິບັດ:
   ກ. ນັກຮຽນຜູ້ທີ່ຮຽນອ່ອນກວ່າໝູ່ຈະໄດ້ຮັບການບຳລຸງໂດຍຜ່ານການຮຽນເພີ່ມ.
   ຂ. ຈັດ 'ຫ້ອງຮຽນບຳລຸງ' ໃຫ້ແກ່ເດັກນ້ອຍຜູ້ທີ່ບໍ່ໄດ້ເຂົ້າໂຮງຮຽນ ລວມທັງ ເດັກນ້ອຍທີ່ປະລະໂຮງຮຽນ ແລະ ເດັກນ້ອຍຜູ້ທີ່ບໍ່ເຄີຍເຂົ້າໂຮງຮຽນ. ຫ້ອງຮຽນບຳລຸງນີ້ ແມ່ນເພື່ອຊ່ວຍເພີ່ມຄວາມສາມາດໃນການອ່ານ ແລະ ສ້າງສະມັດຖະພາບ ໃນດ້ານການຄິດໄລ່ ໃຫ້ແກ່ເດັກນັກຮຽນຮອດຂັ້ນ ປໍ 2 - ປໍ 3 ແລະ ຄວນຈະໃຊ້ເວລາ 2-3 ເດືອນ. ພາຍຫຼັງສຳເລັດພາກບຳລຸງແລ້ວ, ພວກເຂົາເຈົ້າກໍ່ຈະໄດ້ຮັບການຊ່ວຍເຫຼືອເພື່ອໃຫ້ໄດ້ເຂົ້າຫຼືກັບເຂົ້າໂຮງຮຽນຄືນ.
   ຄ. ການຮຽນຮ່ວມໂດຍການຈັດຕັ້ງກຸ່ມປະສົມທີ່ປະກອບດ້ວຍຜູ້ຮຽນເກັ່ງ, ປານກາງ ແລະ ຮຽນອ່ອນ ຈະຊ່ວຍປັບປຸງການຮຽນຂອງຜູ້ຮຽນອ່ອນໃຫ້ດີຂຶ້ນໄດ້.

122 http://www.pratham.org

ໂຄງປະກອບການຈັດຕັ້ງປະຕິບັດນີ້ຄວນຈະປະກອບດ້ວຍພະນັກງານຄູຈາກໂຮງຮຽນລັດ ແລະ ອົງການຈັດຕັ້ງທີ່ບໍ່ແມ່ນລັດຖະບານ ຫຼື ພາກສ່ວນອື່ນໆ ທີ່ມີຄວາມຊໍານານໃນການສິດສອນບໍາລຸງ ເຮັດວຽກຮ່ວມກັນເພື່ອຊ່ວຍເຫຼືອເດັກນ້ອຍຜູ້ທີ່ມີຄວາມຫຍຸ້ງຍາກໃນການຮຽນ.

## ການຈັດຕັ້ງປະຕິບັດໂຄງການອາຫານກາງເວັນສໍາລັບໂຮງຮຽນ[123]

ຜົນການສຶກສາວິໄຈຂອງ ອົງການອາຫານໂລກ ທີ່ໄດ້ດໍາເນີນຮ່ວມກັບລັດຖະບານ ໄດ້ພິສູດໃຫ້ເຫັນວ່າ ເດັກນ້ອຍນັກຮຽນທີ່ມາຈາກຄົວເຮືອນທຸກຍາກບໍ່ໄດ້ຮັບໂພຊະນາການພຽງພໍ (ເຊັ່ນ: ຈາກການສໍາຫຼວດ MICS). ດັ່ງນັ້ນ, ການຈັດຫາອາຫານກາງເວັນຢູ່ໂຮງຮຽນໃຫ້ແກ່ເດັກນັກຮຽນເຫຼົ່ານີ້ ນອກຈາກຈະເປັນການສ້າງຄວາມຕື່ນຕົວທາງດ້ານຈິດໃຈແລ້ວ ກໍ່ຍັງເປັນການຊ່ວຍບໍ່ໃຫ້ພວກເຂົາເກີດຄວາມຫິວອີກດ້ວຍ. ອາຫານທ່ຽງ ບໍ່ຈໍາເປັນຕ້ອງແມ່ນອາຫານເຕັມຄາບ; ອາດຈະປະກອບດ້ວຍ ເຂົ້າ, ໝາກໄມ້, ປາ ຫຼື ຊີ້ນ ແຕກຕ່າງກັນໄປໃນແຕ່ລະມື້. ປະເທດທີ່ກໍາລັງພັດທະນາ (ເຊັ່ນ ປະເທດກໍາປູເຈຍ ທີ່ມີລະດັບການພັດທະນາຄ້າຍຄືກັບ ສປປ ລາວ) ແລະ ປະເທດພັດທະນາແລ້ວສ່ວນໃຫຍ່ ກໍ່ມີໂຄງການໃຫ້ອາຫານກາງເວັນສໍາລັບນັກຮຽນຊັ້ນປະຖົມ. ສປປ ລາວ ເຮົາ ກໍ່ໄດ້ປະຕິບັດໂຄງການປະເພດນີ້ມາແລ້ວໃນບາງຂົງເຂດ. ສະນັ້ນ, ຄວນສືບຕໍ່ເສີມຂະຫຍາຍໂຄງການນີ້ ແລະ ວິທີການທີ່ມີລັກສະນະສ້າງສັນອັນນີ້ຈະຊ່ວຍເພີ່ມປະສິດທິພາບ ການຮຽນໃຫ້ສູງຂຶ້ນໄດ້.

ຢູ່ໃນສະພາບເງື່ອນໄຂຂອງ ສປປ ລາວ ເຮົາແລ້ວ, ເຫັນວ່າບ້ານຈະເປັນຜູ້ສາມາດ ດໍາເນີນການຄຸ້ມຄອງ ບໍລິຫານໂຄງການອາຫານກາງເວັນສໍາລັບໂຮງຮຽນໄດ້ດີທີ່ສຸດ (ພາຍໃຕ້ການຊີ້ນໍາຂອງນາຍບ້ານ) ເນື່ອງຈາກວ່າ ການປະຕິບັດ ໃນລັກສະນະນີ້ຈະຊ່ວຍໃຫ້ຄູສອນສາມາດ ເອົາໃຈໃສ່ໃນການສິດສອນຂອງຕົນໄດ້ເຕັມເວລາ.

## ຂໍ້ສະເໜີແນະອື່ນໆ:

1. ຕ້ອງປັບປຸງຄຸນນະພາບຂອງການສິດສອນໃນຊັ້ນປະຖົມສຶກສາ, ໂດຍສະເພາະໃນດ້ານວິຊາເລກ, ຕັກກະສາດ ແລະ ພາສາສາດໂດຍຖືເອົາການຝຶກອົບຮົມຄູເປັນຈຸດເລີ່ມຕົ້ນ.

2. ຄວນເພີ່ມທະວີຄວາມເຂັ້ມແຂງໃຫ້ແກ່ສະມາຄົມພໍ່ແມ່ນັກຮຽນ-ຄູ ໃນທຸກໆບ້ານ. ນາຍບ້ານ ຫຼື ຮອງນາຍບ້ານພາຍໃຕ້ການຊ່ວຍເຫຼືອຂອງຄູ ຄວນຈັດຕັ້ງກອງປະຊຸມເປັນປະຈໍາໃນທຸກໆເດືອນ. ຄະນະສະມາຄົມພໍ່ແມ່ນັກຮຽນ-ຄູ ຄວນຕິດຕາມກວດກາ ການມາໂຮງຮຽນຂອງນັກຮຽນ ຄຽງຄູ່ກັນກັບການຕິດຕາມກວດກາບັນຫາອື່ນໆເຊັ່ນ ຜົນການຮຽນຂອງນັກຮຽນເປັນຕົ້ນ.

3. ຄວນຈັດຕັ້ງດໍານີນການສອບເສັງ ຫຼື ຮູບການອື່ນໆເພື່ອປະເມີນຜົນການຮຽນຂອງນັກຮຽນຢ່າງສະໝໍ່າສະເໝີ. ການສອບເສັງເຫຼົ່ານີ້ຮັບໃຊ້ຈຸດປະສົງ 2 ປະການຄື: ຕີລາຄາຜົນການສິດສອນຂອງຄູ ແລະ ໃຫ້ຂໍ້ສະເໜີແນະດ້ານການສຶກສາບໍາລຸງເພື່ອຊ່ວຍເຫຼືອນັກຮຽນຜູ້ທີ່ມີຄວາມຫຍຸ້ງຍາກໃນການຮຽນ ຊຶ່ງທັງສອງຢ່າງນີ້ ແມ່ນມີຄວາມໝາຍສໍາຄັນ ຕໍ່ກັບບ້ານທີ່ມີປະຊາກອນສ່ວນໃຫຍ່ເປັນຊົນເຜົ່າອື່ນທີ່ບໍ່ແມ່ນເຜົ່າ ລາວ-ໄຕ.

4. ຢູ່ໃນອົງປະກອບຍ່ອຍ ສະເພາະຂອງໂຄງການການສຶກສາຊັ້ນປະຖົມນີ້ ຄວນສຶກສາຄວາມເປັນໄປໄດ້ໃນ ການມີສ່ວນຮ່ວມກັບພາກເອກະຊົນ ແລະ ຊຸມຊົນ ເຊັ່ນ: ໃນໂຄງການອາຫານກາງເວັນສໍາລັບໂຮງຮຽນ, ການຮັບສະໝັກຄູສອນທີ່ຮູ້ຫຼາຍພາສາ, ການຝຶກອົບຮົມດ້ານການສອນຫ້ອງຄວບ ຫຼື ແມ່ນແຕ່ການຍົກລະດັບໂຮງຮຽນມູນລະປະຖົມມາເປັນໂຮງຮຽນປະຖົມສົມບູນ. ອີງຕາມແຜນຍຸດທະສາດປະຕິຮູບລະບົບການສຶກສາແຫ່ງຊາດ (NESRS), ເຫັນວ່າ ການມີສ່ວນຮ່ວມຂອງພາກເອກະຊົນເຂົ້າໃນການບໍາລຸງຮັກສາ ແລະ ສ້ອມແປງໂຮງຮຽນແມ່ນມີເຖິງ 18% ຊຶ່ງຜົນງານອັນນີ້ຄວນຈະໄດ້ຮັບການເສີມຂະຫຍາຍໃນຕໍ່ໜ້າ[124].

5. ຄູອາຈານປະສົບກັບຄວາມຫຍຸ້ງຍາກ ໃນການພັກເຊົາຢູ່ໃນບາງບ້ານ ຍ້ອນມີທີ່ພັກບໍ່ພຽງພໍ. ຄູຄວນຈະໄດ້ ຮັບການຕອບສະໜອງເຮືອນພັກອາໄສ ຢ່າງເໝາະສົມໃນບ້ານເຫຼົ່ານັ້ນ. ເພື່ອແກ້ໄຂບັນຫານີ້, ຊາວບ້ານສາມາດປະກອບສ່ວນແຮງງານສ້າງທີ່ພັກໃຫ້ແກ່ຄູໃນບ້ານຂອງຕົນເອງໄດ້ (ໃນຍາມພັກ) ໂດຍການສົມທົບກັບ ການຊ່ວຍເຫຼືອ ຈາກບ່ອນອື່ນ. ການປະຕິບັດແນວນີ້ ຖືເປັນເລື່ອງບໍ່ຍາກເກີນໄປ ໃນທ້ອງຖິ່ນຂອງລາວຍ້ອນວ່າ ການອອກແຮງງານລວມໝູ່ ດ້ວຍຄວາມສະໝັກໃຈ ເປັນມູນເຊື້ອສາມັກຄີທີ່ພົ້ນເດັ່ນ ຢູ່ໃນ ສປປ ລາວ ຢູ່ແລ້ວ.

6. ໃນບາງປະເທດ, ຫ້ອງສະໝຸດເຄື່ອນທີ່ຊ່ວຍຫຼຸດຜ່ອນຊ່ອງຫວ່າງໃນການອ່ານໜັງສື. ໃນເຂດຕົວເມືອງຂອງ ສປປ ລາວ ຍັງມີຫ້ອງສະໝຸດເຄື່ອນທີ່ຈໍານວນໜຶ່ງ. ອາດຈະຈັດຕັ້ງທົດລອງປະຕິບັດຫ້ອງສະມຸດເຄື່ອນທີ່ ແບບນີ້ໄດ້ໃນຂັ້ນບ້ານ. ການແປປຶ້ມພື້ນຖານຈໍານວນໜຶ່ງທີ່ຈໍາເປັນມາເປັນພາສາລາວ ກໍ່ແມ່ນສິ່ງໜຶ່ງທີ່ສໍາຄັນເໝືອນກັນ.

7. ປະເທດ ສສ ຫວຽດນາມ ແລະ ອິນເດຍ ໄດ້ສ້າງຕັ້ງໂຮງຮຽນພອນສະຫວັນ ທີ່ສະໜອງການສຶກສາທີ່ມີຄຸນນະພາບດີເລີດໃນຂະແໜງວິຊາເລກ, ຕັກກະສາດ, ແລະ ພາສາສາດ (ໃນຫຼາຍໆວິຊາ). ຕໍ່ມາໂຮງຮຽນດັ່ງກ່າວ ກໍ່ໄດ້ກາຍເປັນໂຮງຮຽນຕົວແບບໃຫ້ແກ່ໂຮງຮຽນອື່ນ.ນັກຮຽນທີ່ຮຽນຈົບຈາກໂຮງຮຽນດັ່ງກ່າວ ຈະກາຍເປັນພະນັກງານຂັ້ນນໍາໃນລັດຖະບານ, ໃນອຸດສາຫະກໍາ, ການຄົ້ນຄວ້າ ແລະ ຂະແໜງການສໍາຄັນອື່ນໆ ລວມທັງກາຍເປັນອາຈານສອນໃນບັນດາໂຮງຮຽນຕົວແບບເຫຼົ່ານີ້ ແລະ ມະຫາວິທະຍາໄລທີ່ມີຄຸນນະພາບອື່ນໆ. ໄລຍະຕົ້ນຂອງການສ້າງຕັ້ງ ແລະ ພັດທະນາໂຮງຮຽນເຫຼົ່ານີ້ຈະດໍາເນີນເປັນໄປໄດ້ດີທີ່ສຸດ ໂດຍຕັ້ງໃຫ້ມີໂຮງຮຽນປະເພດດັ່ງກ່າວ 1 ແຫ່ງກໍ່ພຽງພໍ. ໂຮງຮຽນ ຫຼື ສະຖາບັນປະເພດດັ່ງກ່າວກໍ່ມີ ຢູ່ໃນ ສປປ ລາວ ແລ້ວ, ແຕ່ຄວນພະຍາຍາມເອົາໃຈໃສ່ຈັດຕັ້ງໃຫ້ໂຮງຮຽນທີ່ມີຢູ່ແລ້ວນັ້ນເປັນລະບົບດີຂຶ້ນ.

123 ຂໍ້ມູນອ້າງອີງແມ່ນຢູ່ໃນ MOE (2008b), ໜ້າ 30, ແຕ່ລາຍລະອຽດບໍ່ໄດ້ອະທິບາຍຢ່າງຈະແຈ້ງ.
124 GOL (2008b), ໜ້າ. 3.



ການຮຽນຮູ້ມີຫຼາຍວິທີ, ໃນນັ້ນຮຽນເປັນກຸ່ມກໍ່ແມ່ນວິທີໜຶ່ງ

ຊັບພະຍາກອນຕ່າງໆ ເພື່ອຮັບໃຊ້ບັນດາໂຄງການເຫຼົ່ານີ້ ມີມາຈາກໃສ? ຖ້າຫາກວ່າ ການຈັດສັນ ງົບປະມານຂອງລັດເຂົ້າໃນຂະແໜງການສຶກສານີ້ເພີ່ມຂຶ້ນ ຈາກລະດັບປະຈຸບັນ ກໍ່ຄື 2.9% ຂອງລວມຍອດຜະລິດຕະພັນພາຍໃນມາເປັນ 5-7% ກໍ່ຈະສາມາດເຮັດໃຫ້ມີ ຊັບພະຍາກອນເຫຼົ່ານີ້ພຽງພໍໄດ້. ນີ້ແມ່ນລະດັບງົບປະມານທີ່ ມີຄວາມຈຳເປັນໃຫ້ແກ່ຂະແໜງການສຶກສາທີ່ຫຼາຍປະເທດໃນກຸ່ມອາຊຽນ ແລະ ປະເທດອາຊີຕາເວັນອອກໄດ້ນຳໃຊ້ເພື່ອເຮັດໃຫ້ບັນລຸ ການສຶກສາແບບທົ່ວໄປ ຊຶ່ງແຫຼ່ງງົບປະມານດັ່ງກ່າວນີ້ ແມ່ນໄດ້ມາຈາກລາຍຮັບຈາກຊັບພະຍາກອນທຳມະຊາດ.

## *ຂໍ້ສະຫຼຸບໂດຍຫຍໍ້:*

*ການຈັດສັນງົບປະມານເຂົ້າໃນການຍົກລະດັບການສຶກສາແມ່ນມີຄວາມສຳຄັນ. ເຖິງຢ່າງໃດກໍ່ຕາມ, ລຳພັງແຕ່ງົບປະມານຢ່າງດຽວກໍ່ຍັງບໍ່ທັນພຽງພໍ. ຄຽງຄູ່ກັບການຈັດສັນງົບປະມານນັ້ນ, ແຜນງານທີ່ຍັງເປັນມະໂນພາບ ແລະ ແຜນງານທີ່ສາມາດປະຕິບັດໄດ້ກໍ່ແມ່ນປັດໄຈໜຶ່ງທີ່ມີຄວາມສຳຄັນ ເພື່ອຈະບັນລຸເປົ້າໝາຍດ້ານການສຶກສາຂັ້ນປະຖົມ, ໂດຍສະເພາະໃນເຂດຫ່າງໄກສອກຫຼີກ. ສະນັ້ນ, ບາງວິທີການທີ່ຍົກມາເປັນຂໍ້ສະເໜີແນະ ໃນທີ່ນີ້ອາດປະກອບດ້ວຍ: ການສອນຫ້ອງຄວບ, ການຈັດຕັ້ງກຸ່ມໂຮງຮຽນ, ການຊ່ວຍເຫຼືອນັກຮຽນອ່ອນ, ການປະຕິບັດ ໂຄງການອາຫານກາງເວັນສຳລັບໂຮງຮຽນ, ການສຶກສາແກ່ເດັກນ້ອຍທີ່ມີພໍ່ແມ່ເປັນແຮງງານເຄື່ອນຍ້າຍ, ແລະ ການປະຕິບັດສິ່ງຈູງໃຈແກ່ຄູເປັນຕົ້ນ. ຂໍ້ສະເໜີທີ່ກ່າວມານີ້ມີຄວາມສຳຄັນຫຼາຍຈຶ່ງໄດ້ຍົກຂຶ້ນມາເວົ້າຄືນອີກ.*

## ການທົບທວນຄືນດ້ານການສຶກສາເຕັກນິກ ແລະ ວິຊາຊີບ ໃນ ສປປ ລາວ

ຖ້າວ່າ ອັດຕາການເຂົ້າໂຮງຮຽນໃນປະຈຸບັນ ເປັນຕົວຊີ້ບອກດ້ານການສຶກສາເຕັກນິກ ແລະ ວິຊາຊີບ ໃນ ສປປ ລາວ ກໍ່ສະແດງວ່າການສຶກສາປະເພດດັ່ງກ່າວຍັງບໍ່ເປັນທີ່ນິຍົມກັນຫຼາຍປານໃດ. ສາຍເຫດສ່ວນໜຶ່ງກໍ່ມີສ່ວນພົວພັນເຖິງປະຫວັດສາດ ຄື: ໃນທ້າຍຊຸມປີ 1970, 1980 ແລະ 1990 ໄດ້ມີນັກສຶກສາຈຳນວນໜຶ່ງໄປສຶກສາຕໍ່ໃນລະດັບຊັ້ນສູງ ຢູ່ກຸ່ມປະເທດຕາເວັນອອກ ແລະ ໃນເວລາທີ່ເຂົາເຈົ້າກັບຄືນມາພ້ອມກັບໃບປະກາດ ລະດັບປະລິນຍາຕີເຂົາເຈົ້າກໍ່ໄດ້ເຮັດວຽກເປັນພະນັກງານໃນຫ້ອງການ. ຖ້າຮຽນຈົບລະດັບການສຶກສາເຕັກນິກ ແລະ ວິຊາຊີບຈະໄດ້ຮັບໃບປະກາດສະນິຍະບັດຊັ້ນສູງ ແລະ ຊາວໜຸ່ມເອງກໍ່ພົບວ່າການສຶກສາເຕັກນິກ ແລະ ວິຊາຊີບນີ້ບໍ່ໜ້າສົນໃຈຍ້ອນວ່າ ຫຼັງຈາກຮຽນຈົບແລ້ວກໍ່ໄປເຮັດວຽກງານ ໃນໂຮງຈັກໂຮງງານເທົ່ານັ້ນ. ເຖິງຢ່າງໃດກໍ່ຕາມ, ໃນລະບົບເສດຖະກິດທີ່ອາໄສຄວາມຮູ້ເປັນໂຕຂັບເຄື່ອນ, ເຕັກໂນໂລຊີ ແມ່ນປັດໄຈທີ່ເປັນໃຈກາງ ຂອງການພັດທະນາເສດຖະກິດ ແລະ ຄວາມຢູ່ດີກິນດີຂອງຄົນ. ສະນັ້ນ, ຈຶ່ງມີຄວາມຈຳເປັນທີ່ ຈະຕ້ອງຮັບຮູ້ເຖິງບົດບາດຄວາມສຳຄັນ ຂອງເຕັກໂນໂລຊີໃນການສຶກສາໃຫ້ຫຼາຍຂຶ້ນ. ຄຽງຄູ່ກັນນັ້ນ, ການສຶກສາພາກເຕັກນິກ ແລະ ວິຊາຊີບກໍ່ຍັງມີຄວາມຮຽກຮ້ອງຕ້ອງການໃຫ້ມີການປັບປຸງຫຼາຍດ້ານ.

ການປະເມີນຜົນໂດຍກະຊວງສຶກສາທິການ ຍັງໄດ້ພົບເຫັນວ່າລະບົບການສຶກສາໃນປະຈຸບັນຍັງຂາດການສະໜັບສະໜູນດ້ານການເງິນ, ຂາດຊັບພະຍາກອນ, ຂາດຄູສອນທີ່ໄດ້ຜ່ານການຝຶກອົບຮົມ,



ການຮຽນຮູ້ຈາກພາກປະຕິບັດຕົວຈິງແມ່ນມີຄ່າມະຫາສານໃຫ້ແກ່ການສຶກສາວິຊາຊີບ

ມີລາຄາແພງຕໍ່ນັກຮຽນ ແລະ ການສຶກສາສ່ວນໃຫຍ່ລວມສູນຢູ່ໃນແຕ່ເຂດຕົວເມືອງໃຫຍ່, ດັ່ງນັ້ນ ຈຶ່ງບໍ່ເປັນທີ່ດຶງດູດຊາວໜຸ່ມ. ຍ້ອນສາຍເຫດດັ່ງກ່າວນີ້, ຈຶ່ງເຮັດໃຫ້ອັດຕາການເຂົ້າໂຮງຮຽນຫຼຸດລົງ (ກ່ອງ 6.1). ນະໂຍບາຍປະຕິຮູບ ການສຶກສາໃໝ່ຂອງ ປີ 2008 ຮັບຮູ້ໃນບັນຫາເຫຼົ່ານີ້ດີ. ຄຽງຄູ່ກັບການສະເໜີໃຫ້ເປີດໂຮງຮຽນເຕັກນິກ ແລະ ວິຊາຊີບຂຶ້ນໃນທຸກໆແຂວງແລ້ວ, ນະໂຍບາຍດັ່ງກ່າວຍັງໄດ້ສະເໜີໃຫ້ປັບປຸງລະບົບຫຼັກສູດ ແລະ ເພີ່ມຈຳນວນນັກຮຽນຂຶ້ນໃຫ້ເປັນສອງເທົ່າພາຍໃນ ປີ 2010. ເອກະສານດັ່ງກ່າວຍັງໄດ້ສະເໜີໃຫ້ມີການຮ່ວມມືກັບພາກເອກະຊົນໃຫ້ຫຼາຍຂຶ້ນ[125].

ບາງບັນຫາຫຼັກທີ່ຈຳເປັນຕ້ອງເອົາໃຈໃສ່ແກ້ໄຂມີດັ່ງຕໍ່ໄປນີ້[126]:

1. ເນື່ອງຈາກວ່າ ອັດຕາການເຂົ້າຮຽນໃນລະບົບການສຶກສາພາກເຕັກນິກ ແລະ ວິຊາຊີບໄດ້ຫຼຸດລົງ ຈຶ່ງມີຄວາມຈຳເປັນ ທີ່ຈະຕ້ອງດຳເນີນການປະເມີນ ຄວາມຕ້ອງການ ດ້ານການສຶກສາພາກດັ່ງກ່າວ. ຄຳຕອບລະອຽດຈະໄດ້ຮັບຈາກການສຳຫຼວດຄວາມຕ້ອງການຈາກນາຍຈ້າງ, ກຸ່ມນັກຮຽນເປົ້າໝາຍທີ່ຄາດວ່າຈະສະໝັກ ແລະ ນັກຮຽນທີ່ຮຽນຈົບໄປແລ້ວ. ການປະເມີນຄວາມຕ້ອງການດັ່ງກ່າວຄວນ ຕັ້ງຄຳຖາມກ່ຽວກັບໄລຍະເວລາຂອງການຮຽນ, ຄຸນນະພາບ, ຂັ້ນຕອນການຮັບສະໝັກ ແລະ ຄ່າໃຊ້ຈ່າຍຂອງນັກຮຽນ. ຄວນຈັດຕັ້ງດຳເນີນການສຳຫຼວດຄວາມຕ້ອງການທາງດ້ານທັກສະສີມືຂອງແຮງງານສຳລັບຂະແໜງອຸດສາຫະກຳໃນໜຶ່ງ ຫຼື ສອງທົດສະວັດຂ້າງໜ້າ ເພື່ອໃຫ້ ກະຊວງສຶກສາທິການ ສາມາດວາງແຜນການທີ່ເໝາະສົມເພື່ອສ້າງຊັບພະຍາກອນມະນຸດທີ່ມີທັກສະສີມືພາຍໃນປະເທດ.

2. ເນື່ອງຈາກວ່າແຮງງານຢູ່ໃນຫຼາຍຂະແໜງການຍັງມີທັກສະສີມືຕ່ຳ; ດັ່ງນັ້ນ ຈຶ່ງຄວນຈັດຕັ້ງການຮ່ວມມືກັນ ລະຫວ່າງພາກເອກະຊົນ ແລະ ໂຮງຮຽນເຕັກນິກ ແລະ ວິຊາຊີບ ທັງນີ້ກໍ່ເພື່ອສາມາດສະໜອງການຝຶກອົບຮົມຕາມຫຼັກສູດປົກກະຕິ ຫຼື ຫຼັກສູດໄລຍະສັ້ນໃນໂຮງຮຽນໃຫ້ແກ່ແຮງງານ. ການແລກປ່ຽນດັ່ງກ່າວຈະມີຜົນປະໂຫຍດໃຫ້ແກ່ທັງສອງຝ່າຍຄື: ໂຮງຮຽນຈະສາມາດຮູ້ໄດ້ວ່າຂະແໜງການຕ່າງໆມີຄວາມຕ້ອງການຄືແນວໃດ ແລະ ແຮງງານຂອງຂະແໜງການຕົນເອງ ກໍ່ຍັງຈະໄດ້ຮັບການຝຶກອົບຮົມຢ່າງເໝາະສົມ. ສາຍພົວພັນລະຫວ່າງອຸດສາຫະກຳ ແລະ ການສຶກສາເຕັກນິກ ແລະ ວິຊາຊີບ ແລະ ພາກເອກະຊົນຄວນໄດ້ຮັບການເສີມຂະຫຍາຍເພື່ອໃຫ້ຄູສອນສາມາດໃຊ້ເວລາຢ່າງມີຄຸນນະພາບຢູ່ໃນອຸດສາຫະກຳ ແລະ ພະນັກງານຢູ່ໃນຂະແໜງອຸດສາຫະກຳເອງກໍ່ສາມາດມາສອນຢູ່ໃນໂຮງຮຽນເຕັກນິກ ແລະ ວິຊາຊີບໄດ້ບົນພື້ນຖານການຄັດເລືອກ.

3. ກ່ອງ 6.1 ສະແດງໃຫ້ເຫັນວ່ານັກຮຽນຜູ້ທີ່ໃຊ້ເວລາໃນການຮຽນ 13-14 ປີ (ໂດຍສະເພາະຢູ່ໃນເຂດຕົວເມືອງໃຫຍ່) ໄດ້

125 MOE (2008c).

126 ບັນຫາເຫຼົ່ານີ້ຈຳນວນໜຶ່ງ ກໍ່ໄດ້ນຳສະເໜີຢູ່ໃນກຸ່ມດຳເນີນການຄົ້ນຄວ້າດ້ານການສຶກສາ. ບັນຫາດັ່ງກ່າວໄດ້ຍົກຂຶ້ນມາຍໍ້າຄືນຕື່ມ ຍ້ອນວ່າ ບັນຫາເຫຼົ່ານັ້ນມີຄວາມສອດຄ່ອງ ແລະ ຄວນຈະນຳໄປພິຈາລະນາຢູ່ໃນກອບນະໂຍບາຍໃຫຍ່.

### ກ່ອງ 6.1: ການປະເມີນລະບົບການສຶກສາເຕັກນິກ ແລະ ວິຊາຊີບໃນໄລຍະຜ່ານມາ

ໃນປີ 2007-08 ມີໂຮງຮຽນວິຊາຊີບທັງໝົດ 11 ແຫ່ງ ຊຶ່ງໃນນັ້ນມີນັກຮຽນ 643 ຄົນ ແລະ ໂຮງຮຽນເຕັກນິກ ການຊ່າງ 41 ແຫ່ງ ຊຶ່ງມີນັກຮຽນ 15,102 ຄົນ. ນັກຮຽນຍິງກວມເອົາປະມານ 30-35% ຊຶ່ງສ່ວນໃຫຍ່ແມ່ນຮຽນຂະແໜງວິຊາຕັດຫຍິບ, ປຸງແຕ່ງ ແລະ ວິຊາອື່ນທີ່ມີລັກສະນະຄ້າຍຄືກັນ. ນອກຈາກນັ້ນ, ກະຊວງແຮງງານ ແລະ ສະຫວັດດີການສັງຄົມ ຍັງໄດ້ເປີດສູນພັດທະນາສີມືແຮງງານຂຶ້ນອີກ 3 ແຫ່ງ ຊຶ່ງມີລັກສະນະແຕກຕ່າງຈາກໂຮງຮຽນວິຊາຊີບທົ່ວໄປຍ້ອນວ່າ ສູນດັ່ງກ່າວໄດ້ສະໜອງການຝຶກອົບຮົມໃນຫຼາຍລະດັບໃຫ້ແກ່ ຊາວໜຸ່ມໃນຫຼາຍກຸ່ມອາຍຸ. ແຕ່ເຖິງຢ່າງໃດກໍ່ຕາມ, ໂຮງຮຽນເຕັກນິກ ແລະ ວິຊາຊີບ ກໍ່ຍັງແມ່ນ ສະຖາບັນການສຶກສາຫຼັກແຫຼ່ງຂອງການສຶກສາເຕັກນິກ ແລະ ວິຊາຊີບຂອງລາວ. ໂຮງຮຽນເຕັກນິກ ແລະ ວິຊາຊີບສະໜອງການຝຶກອົບຮົມໄລຍະສັ້ນນັບຕັ້ງແຕ່ 1 ເດືອນ (ແຕ່ກໍ່ມີໜ້ອຍ) ໄປຈົນເຖິງໄລຍະຍາວ 2-3 ປີ ຫຼັງຈາກຈົບ ມ.3 ຫຼື ມ.6 ແລ້ວ (ຫຼັງຈາກຈົບ ມ.6 ແມ່ນຫຼາຍກວ່າເມື່ອທຽບກັບຈົບ ມ.3).

ບາງບັນຫາກ່ຽວກັບລະບົບການສຶກສາເຕັກນິກ ແລະ ວິຊາຊີບທີ່ຄວນເອົາໃຈໃສ່:

1. ໂຮງຮຽນເຕັກນິກ ແລະ ວິຊາຊີບສ່ວນໃຫຍ່ແມ່ນລວມສູນກັນຢູ່ໃນເຂດຕົວເມືອງໃຫຍ່; ປະຊາຊົນຢູ່ເຂດຫ່າງໄກສອກຫຼີກຍັງຂາດໂຮງຮຽນເຕັກນິກ ແລະ ວິຊາຊີບຕັ້ງຢູ່ໃນທ້ອງຖິ່ນ. ສັດສ່ວນນັກຮຽນຊົນເຜົ່າຍັງມີໜ້ອຍຫຼາຍ ຊຶ່ງເຫດຜົນສ່ວນໜຶ່ງກໍ່ແມ່ນຍ້ອນເຂົາເຈົ້າອາໄສຢູ່ເຂດຫ່າງໄກສອກຫຼີກ.

2. ໂຮງຮຽນເຕັກນິກ ແລະ ວິຊາຊີບຍັງເກັບຄ່າທຳນຽມເຂົ້າຮຽນສູງ ແລະ ເຮັດໃຫ້ນັກຮຽນຫຼາຍຄົນບໍ່ສາມາດເຂົ້າຮຽນເຕັກນິກ ແລະ ວິຊາຊີບໄດ້. ຄ່າໃຊ້ຈ່າຍລວມມີຄ່າລົງທະບຽນເຂົ້າຮຽນ 150,000 ກີບ, ຄ່າຮຽນເຕັກນິກຊັ້ນກາງ 1,500,000 ກີບຂຶ້ນໄປ ແລະ ສຳລັບຊັ້ນສູງກວ່າແມ່ນເກັບຄ່າຮຽນຫຼາຍກວ່ານັ້ນ (ຕໍ່ພາກຮຽນໜຶ່ງ), ຄ່າປຶ້ມພ້ອມກັບອຸປະກອນ, ຄ່າທີ່ພັກ ແລະ ອາຫານລວມແລ້ວແມ່ນຕົກປະມານ 80,000-200,000 ກີບ (ຕໍ່ເດືອນ). ຄ່າໃຊ້ຈ່າຍທັງໝົດ ແມ່ນສູງກວ່າຢູ່ປະເທດເພື່ອນບ້ານ ກໍ່ຄື ປະເທດໄທ ຫຼື ຫວຽດນາມ. ສຳລັບນັກຮຽນຜູ້ທີ່ມີຖານະດີ ແລະ ສາມາດຈ່າຍຄ່າຮຽນໄດ້, ພວກເຂົາແມ່ນຢາກຮຽນລະດັບມະຫາວິທະຍາໄລຫຼາຍກວ່າຈະມາຮຽນໃນໂຮງຮຽນເຕັກນິກ ແລະ ວິຊາຊີບທີ່ໄດ້ພຽງແຕ່ໃບປະກາດສະນິຍະບັດຊັ້ນຕົ້ນ ຫຼື ຊັ້ນກາງ. ສະນັ້ນ, ຄວາມສົນໃຈຕໍ່ກັບການສຶກສາດ້ານເຕັກນິກ ແລະ ວິຊາຊີບນີ້ຈຶ່ງມີບໍ່ຫຼາຍ.

3. ຂັ້ນຕອນການຮັບສະໝັກມີລັກສະນະຕາຍໂຕ: ເງື່ອນໄຂຂອງຜູ້ທີ່ສາມາດສະໝັກໃນຂະແໜງຕ່າງໆສ່ວນໃຫຍ່ແມ່ນຕ້ອງເປັນຜູ້ທີ່ຮຽນຈົບ ມ.6 ແລະ ມີໄລຍະເວລາການຮຽນ 2-3 ປີ. ສະນັ້ນ, ນັກຮຽນທີ່ຮຽນບໍ່ຈົບ ຫຼື ຜູ້ທີ່ຕ້ອງການຮຽນຫຼັກສູດໄລຍະສັ້ນ ຫຼື ຮຽນຮູ້ວິຊາອື່ນເພີ່ມເຕີມ ແມ່ນບໍ່ສາມາດເຂົ້າຮຽນໄດ້.

4. ຄຸນນະພາບຂອງການສິດສອນແມ່ນບໍ່ເທົ່າກັນ: ມີພາກປະຕິບັດຕົວຈິງພຽງໜ້ອຍດຽວ, ໂຮງຮຽນສ່ວນໃຫຍ່ບໍ່ມີຫ້ອງສະໝຸດ, ມີປຶ້ມທີ່ເປັນພາສາລາວຈຳນວນໜ້ອຍ, ມີຫ້ອງທົດລອງ ແລະ ຫ້ອງປະຊຸມທີ່ມີອຸປະກອນບໍ່ພຽງພໍ, ເຄື່ອງຈັກທີ່ເປ່ເພ, ຄູອາຈານທີ່ບໍ່ໄດ້ມາດຕະຖານ. ສິ່ງເຫຼົ່ານີ້ແມ່ນພຽງແຕ່ບັນຫາສ່ວນໜຶ່ງ ເທົ່ານັ້ນທີ່ຍົກຂຶ້ນມາໃຫ້ເຫັນ.

5. ໂຮງຮຽນໄດ້ຮັບການສະໜັບສະໜູນດ້ານການເງິນບໍ່ພຽງພໍ ແລະ ໂຮງຮຽນສ່ວນຫຼາຍຕ້ອງໄດ້ເປີດບໍລິການໃຫ້ເຊົ່າສິ່ງອຳນວຍຄວາມສະດວກຂອງເຂົາເຈົ້າເພື່ອເພີ່ມລາຍຮັບ. ມີພຽງແຕ່ໂຮງຮຽນທີ່ໄດ້ຮັບການຊ່ວຍເຫຼືອ ຈາກຕ່າງປະເທດເທົ່ານັ້ນທີ່ສາມາດດຳເນີນກິດຈະການໄດ້ດີກວ່າເກນສະເລ່ຍ.

6. ບໍ່ມີການຢັ້ງຢືນໜ່ວຍກິດທີ່ແນ່ນອນ. ລະບົບການກວດກາ ແລະ ການສອບເສັງກໍ່ຍັງຕໍ່າ.

7. ບັນຫາທີ່ຄວນເອົາໃຈໃສ່: ຫາກພິຈາລະນາເຖິງທີ່ຕັ້ງຂອງໂຮງຮຽນ, ຄ່າໃຊ້ຈ່າຍ ແລະ ໄລຍະເວລາຮຽນ ແລ້ວຈະເຫັນວ່າ ຫຼັກສູດການຮຽນ ແມ່ນເລັ່ງໃສ່ເປົ້າໝາຍນັກຮຽນທີ່ມາຈາກຄອບຄົວຢູ່ໃນຕົວເມືອງທີ່ມີຖານະເສດຖະກິດປານກາງ ແລະ ຖານະດີຫຼາຍກວ່າ. ເຖິງຢ່າງໃດກໍ່ຕາມ, ເນື່ອງຈາກວ່າການເຂົ້າຮຽນຢູ່ໃນໂຮງ ຮຽນດັ່ງກ່າວແມ່ນບໍ່ໄດ້ຮັບປະລິນຍາ (ໃນລະດັບໃບປະກາດສະນິຍະບັດຈົບເຕັກນິກ ແລະ ວິຊາຊີບເທົ່ານັ້ນ), ວຽກງານທີ່ພວກເຂົາເຈົ້າສາມາດຊອກໄດ້ຫຼັງຈາກຮຽນຈົບແລ້ວ ສ່ວນໃຫຍ່ກໍ່ແມ່ນວຽກຢູ່ໃນໂຮງຈັກໂຮງງານ ຫຼື ຢູ່ໃນພາກສະໜາມ (ບໍ່ແມ່ນວຽກໃນຫ້ອງການ). ດັ່ງນັ້ນ, ນັກຮຽນທີ່ມາຈາກຄອບຄົວຢູ່ໃນຕົວເມືອງທີ່ມີຖານະເສດຖະກິດລະດັບປານກາງ ແລະ ສູງກວ່າຈຶ່ງຢາກໄປຮຽນຕໍ່ຢູ່ມະຫາວິທະຍາໄລຫຼາຍກວ່າເຖິງແມ່ນວ່າ ພວກເຂົາເຈົ້າຈະບໍ່ໄດ້ຮັບໃບປະກາດສະນິຍະບັດຮຽນຈົບລະດັບເຕັກນິກ ຫຼື ວິຊາຊີບກໍ່ຕາມ.

ໃນ ປີ 2007-08, ອັດຕາການເຂົ້າຮຽນໃນໂຮງຮຽນວິຊາຊີບໄດ້ຫຼຸດລົງ 70%, ແລະ ສ່ວນອັດຕາການເຂົ້າຮຽນໃນໂຮງຮຽນເຕັກນິກກໍ່ຫຼຸດລົງເລັກໜ້ອຍ.

***ແຫຼ່ງຂໍ້ມູນ:*** *ກະຊວງສຶກສາທິການ (2008).*



ແມ່ຍິງກໍ່ສາມາດເຮັດວຽກໃນຫລາຍກິດຈະກຳທີ່ບໍ່ແມ່ນກະສິກຳໄດ້ຢ່າງມີປະສິດທິຜົນ

ພົບວ່າວຽກງານເຕັກນິກ ແລະ ວິຊາຊີບເປັນວຽກງານທີ່ບໍ່ໜ້າສົນໃຈເຖິງວ່າຈະມີຄຸນນະພາບດີກໍ່ຕາມ. ສະນັ້ນ, ທີ່ຕັ້ງຂອງໂຮງຮຽນໃໝ່ (ຫຼື ການຍ້າຍທີ່ຕັ້ງຂອງໂຮງຮຽນເກົ່າທີ່ມີນັກຮຽນໜ້ອຍບໍ່ແທດເໝາະ) ກໍ່ຈະຕ້ອງໄດ້ຜ່ານການພິຈາລະນາຢ່າງຖີ່ຖ້ວນ. ໂດຍສະເພາະຢ່າງຍິ່ງ, ການສ້າງຕັ້ງໂຮງຮຽນເຕັກນິກ ແລະ ວິຊາຊີບນັ້ນ ຄວນສ້າງຕັ້ງຢູ່ໃນເຂດທີ່ມີນັກຮຽນຫຼາຍຄົນ ມີຄວາມສົນໃຈໃນວິຊາຮຽນນີ້ ເຊັ່ນວ່າ ຢູ່ເມືອງໃນເທດສະບານແຂວງ ຫຼື ເມືອງ.

4.1. ຖ້າຈັດໃຫ້ມີລະບົບຫຼັກສູດເປັນພາກກໍ່ຈະເປັນປະໂຫຍດຫຼາຍ ເຊັ່ນວ່າ ຖ້ານັກຮຽນເຂົ້າໂຮງຮຽນ ຕາມຫຼັກສູດສອງປີ ແລະ ຫຼັງຈາກຮຽນຈົບສອງປີແລ້ວ ກໍ່ໄດ້ໃບປະກາດສະນິຍະບັດ ແລະ ອອກໄປເຮັດວຽກ. ເມື່ອເຮັດວຽກໄປໄດ້ໜຶ່ງປີ ຫຼື ສອງປີແລ້ວ ນັກຮຽນຜູ້ນັ້ນຄວນສາມາດກັບຄືນມາຮຽນຕື່ມອີກໜຶ່ງປີເພື່ອໃຫ້ໄດ້ໃບປະກາດສະນິຍະບັດຫຼັກສູດ 3 ປີ. ໃນລັກສະນະດຽວກັນນັ້ນ, ຄວນໃຫ້ໂອກາດນັກຮຽນຜູ້ທີ່ຮຽນຈົບຊັ້ນສູງສາມາດໄດ້ຮັບ ປະລິນຍາຕຣີຖ້າເຂົາເຈົ້າຫາກຮຽນບາງວິຊາເຊື່ອມຕໍ່ລະຫວ່າງລະດັບການຮຽນຊັ້ນສູງ ແລະ ລະດັບທີ່ຕ້ອງການ. ນອກຈາກນີ້, ກໍ່ອາດຈະສ້າງໂອກາດ ແລະ ເງື່ອນໄຂເພື່ອຕອບສະໜອງຄວາມຕ້ອງການ ໃຫ້ຜູ້ທີ່ເຮັດວຽກໄດ້ສືບຕໍ່ຮຽນ ແລະ ຍົກລະດັບຄຸນນະວຸດທິຂອງຕົນ ໂດຍການຈັດຕັ້ງໃຫ້ມີຫ້ອງຮຽນພາກຄ່ຳ ແລະ ທ້າຍອາທິດຂຶ້ນ.

4.2. ຄວນເພີ່ມຈຳນວນນັກຮຽນ ທີ່ສາມາດເຂົ້າຮຽນໃນລະບົບການສຶກສາພາກເຕັກນິກ ແລະ ວິຊາຊີບໃຫ້ຫຼາຍຂຶ້ນ, ໂດຍສະເພາະຜູ້ທີ່ຮຽນຈົບລະດັບມັດທະຍົມຕອນຕົ້ນ. ນອກຈາກນີ້ ກໍ່ຄວນພິຈາລະນາຄວາມເປັນໄປໄດ້ໃນການຫຼຸດມາດຕະຖານ ຫຼື ເງື່ອນໄຂໃນການຮັບສະໝັກເອົາຜູ້ເຂົ້າຮຽນມາເປັນລະດັບມັດທະຍົມຕອນຕົ້ນປີທີ 1.

4.3. ຫຼັກສູດບາງວິຊາ ກໍ່ຄວນໃຫ້ສອດຄ່ອງກັບສະພາບທ້ອງຖິ່ນເພື່ອໃຫ້ສາມາດນຳໃຊ້ທ່າແຮງຂອງທ້ອງຖິ່ນໄດ້ດີຂຶ້ນ.

5. ບົນພື້ນຖານການຄັດເລືອກ, ໂຮງຮຽນທີ່ມີຄວາມກ້າວໜ້າຄວນຍົກລະດັບມາເປັນວິທະຍາໄລທີ່ສາມາດສອນລະດັບຊັ້ນສູງ ຫຼື ປະລິນຍາໄດ້. ສະຖາບັນວິສາວະກຳທີ່ສອນລະດັບຊັ້ນສູງ ຫຼື ປະລິນຍາຈະສາມາດ ຊ່ວຍດຶງດູດເອົານັກຮຽນດີເດັ່ນເຂົ້າມາຮຽນໃນສາຂາວິຊານີ້ໃຫ້ຫຼາຍຂຶ້ນ ຊຶ່ງເປັນການເພີ່ມມາດຕະຖານເຕັກໂນໂລຊີ ແລະ ທັງກາຍເປັນສູນລວມຄວາມຮູ້ດ້ານເຕັກໂນໂລຊີໃນປະເທດລາວນຳອີກດ້ວຍ. ໃນຂັ້ນເລີ່ມຕົ້ນນີ້, ຄວນຮ່ວມມືຢ່າງແໜ້ນແຟ້ນ ກັບສະຖາບັນຕ່າງປະເທດ ແລະ ຫຼັງຈາກນັ້ນກໍ່ຄ່ອຍໆປັບຄວາມຮູ້ໃຫ້ມີລັກສະນະຊາດຫຼາຍຂຶ້ນ.

6. ໃນປະຈຸບັນ, ມີພຽງແຕ່ 20% ຂອງນັກຮຽນທັງໝົດທີ່ເຂົ້າໂຮງຮຽນໂດຍຜ່ານການສອບເສັງ ແລະ 10% ແມ່ນຜ່ານລະບົບໂກຕາຈາກແຂວງຕ່າງໆ. ສ່ວນທີ່ເຫຼືອອີກ 70% ແມ່ນຕ້ອງໄດ້ຈ່າຍເງິນ. ສະນັ້ນ, ຄວນປັບປຸງລະບົບການຄັດເລືອກນັກຮຽນເພື່ອໃຫ້ອັດຕາສ່ວນຂອງນັກຮຽນຜູ້ທີ່ເຂົ້າໂຮງຮຽນ ໂດຍຜ່ານການສອບເສັງເພີ່ມຫຼາຍຂຶ້ນກ່ວາເກົ່າ: ຄຸນສົມບັດໃນການຮຽນມີຄຸນຄ່າຫຼາຍກວ່າປັດໄຈອື່ນໃດ. ນອກຈາກນັ້ນ, ກໍ່ຄວນພິຈາລະນາທົບທວນຄືນໂກຕາຈາກແຂວງ ທັງນີ້ກໍ່ເພື່ອເປັນການສົ່ງເສີມການຕອບຮັບທີ່ດີກໍ່ຄືການເພີ່ມໂກຕາໃຫ້ແຂວງ.

7. ກ່ອງ 6.1 ໄດ້ລະບຸໃຫ້ເຫັນວ່າຄ່າຈ້າງຮຽນ ແລະ ຄ່າໃຊ້ຈ່າຍອື່ນໆທີ່ກ່ຽວຂ້ອງກັບການຮຽນແມ່ນ ສູງເກີນໄປເມື່ອທຽບກັບລາຍຮັບທົ່ວໄປຂອງປະຊາຊົນ ແລະ ທັງຍັງສູງຫຼາຍກວ່າຄ່າໃຊ້ຈ່າຍໃນ ການຮຽນລັກສະນະດຽວກັນຢູ່ໃນປະເທດເພື່ອນບ້ານ. ບັນຫາຄ່າໃຊ້ຈ່າຍໃນການຮຽນນີ້ ຕ້ອງໄດ້ປັບໃຫ້ຖືກລົງ ຫຼື ຢ່າງໜ້ອຍສຸດກໍ່ ຕ້ອງປະຕິບັດນະໂຍບາຍສະໜອງທຶນການສຶກສາໃຫ້ແກ່ນັກຮຽນ[127].

8. ໂຮງຮຽນທີ່ໄດ້ຮັບການສະໜັບສະໜູນ ຈາກການຊ່ວຍເຫຼືອຂອງສາກົນ ແມ່ນມີຜົນສຳເລັດຫຼາຍກວ່າໂຮງຮຽນອື່ນໆ. ດັ່ງນັ້ນ, ເພື່ອປັບປຸງຄຸນນະພາບການຮຽນ-ການສອນໃຫ້ດີຂຶ້ນ ຈຳເປັນຕ້ອງມີການ ຮ່ວມມືກັບໂຮງຮຽນ ຂອງຕ່າງປະເທດໃຫ້ແໜ້ນແຟ້ນຂຶ້ນຕື່ມ. ລະບົບຮ່ວມມືສອງຝ່າຍ ແບບພັດທະນາ ຄຽງຄູ່ກັນໄປ ສາມາດຊ່ວຍບັນລຸວຽກງານດັ່ງກ່າວໄດ້ໃນຕົ້ນທຶນທີ່ຕ່ຳເຊັ່ນ ການແລກປ່ຽນຫຼັກສູດການຮຽນ-ການສອນ ແລະ ຮັບເອົາການບໍລິຈາກປຶ້ມຕຳລາ ແລະ ອຸປະກອນຕ່າງໆ ກັບບັນດາໂຮງຮຽນຢູ່ໃນປະເທດ ທີ່ມີລາຍຮັບປານກາງ (ຕົວຢ່າງ ປະເທດໃນກຸ່ມອາຊຽນ, ຈີນ ແລະ ອິນເດຍເປັນຕົ້ນ).

9. ຄວນສ້າງຕັ້ງກອງທຶນພິເສດເພື່ອນຳໄປຊ່ວຍຍົກລະດັບຄຸນນະພາບຂອງຄູສອນ. ຢ່າງໜ້ອຍສຸດ, ຖ້າຫາກບໍ່ຈົບລະດັບປະລິນຍາໂທ ກໍ່ຄວນໃຫ້ຄູທຸກຄົນຈົບລະດັບປະລິນຍາຕຣີ ແຕ່ບໍ່ຄວນໃຫ້ຈົບແຕ່ພຽງລະດັບຊັ້ນສູງເທົ່ານັ້ນ.

10. ໃນແຕ່ລະປີ ປະເທດຕ່າງໆໄດ້ໃຫ້ທຶນຊ່ວຍເຫຼືອດ້ານການສຶກສາແກ່ນັກສຶກສາລາວຈຳນວນຫຼວງຫຼາຍ ເພື່ອໄປຮຽນຕໍ່ທີ່ປະເທດຂອງເຂົາເຈົ້າ. ແທນທີ່ວ່າຈະເຮັດແນວນັ້ນ, ລາວເຮົາຄວນສະເໜີໃຫ້ບັນດາປະເທດເຫຼົ່ານັ້ນຊ່ວຍສ້າງຄວາມເຂັ້ມແຂງໃຫ້ແກ່ໂຮງຮຽນເຕັກນິກ ແລະ ວິຊາຊີບຢູ່ພາຍໃນປະເທດຂອງຕົນໃຫ້ຫຼາຍຂຶ້ນຍ້ອນວ່າ ໂຮງຮຽນພາຍໃນປະເທດສາມາດກາຍເປັນແຫຼ່ງຖ່າຍທອດ ແລະ ເຜີຍແຜ່ຄວາມຮູ້ໄດ້ດີກວ່າ. ນອກຈາກນັ້ນ, ນັກສຶກສາຢູ່ລາວ ເຊັ່ນນັກສຶກສາທີ່ຮຽນດ້ານວິສາວະກຳຢູ່ລາວ ຫຼັງຈາກຮຽນຈົບແລ້ວເຂົາເຈົ້າກໍ່ຈະກາຍເປັນວິສາວະກອນ. ສ່ວນນັກສຶກສາທີ່ໄດ້ຮັບທຶນການສຶກສາໄປຮຽນຢູ່ຕ່າງປະເທດອາດຈະເລືອກວິຊາທີ່ບໍ່ສອດຄ່ອງກັບ ສປປ ລາວ ແລະ ຫຼັງຈາກຮຽນຈົບມາແລ້ວກໍ່ເຮັດວຽກທີ່ບໍ່ສອດຄ່ອງກັບວິຊາຮຽນຂອງຕົນທີ່ໄດ້ຮຽນມາເຊັ່ນຮຽນຈົບດ້ານການທ່ອງທ່ຽວ ຫຼື ກ່ຽວກັບພຶກສາສາດຈາກມະຫາວິທະຍາໄລຂອງຕ່າງປະເທດ ແຕ່ພັດມາເຮັດວຽກເປັນພະນັກງານໂຄງການຂອງອົງການຈັດຕັ້ງໃຫ້ການຊ່ວຍເຫຼືອ.

11. ຕ້ອງຈັດຕັ້ງການຝຶກອົບຮົມດ້ານພາສາອັງກິດໂດຍສຸມໃສ່ຄູອາຈານເນື່ອງຈາກວ່າປຶ້ມແບບຮຽນ ແລະ ອຸປະກອນການສອນຕ່າງໆສ່ວນໃຫຍ່ເປັນພາສາອັງກິດ. ແຕ່ໃນອີກດ້ານໜຶ່ງ, ນັກຮຽນຜູ້ທີ່ໄດ້ທຶນໄປຮຽນຕໍ່ຢູ່ຕ່າງປະເທດສ່ວນໃຫຍ່ ແມ່ນໄດ້ຮຽນພາສາຂອງປະເທດທີ່ເຂົາເຈົ້າໄປຮຽນ. ສະນັ້ນ, ຈຶ່ງຈຳເປັນຕ້ອງສຶກສາລະອຽດເຖິງວິທີການທີ່ຈະດຳເນີນໃນຂັ້ນຕໍ່ໄປ.

12. ການຮ່ວມທຶນກັບພາກເອກະຊົນ ແລະ ການມີສ່ວນຮ່ວມຂອງເຂົາເຈົ້າໃນການໃຫ້ຄຳປຶກສາຫາລືຈະສາມາດຊ່ວຍຂະຫຍາຍພື້ນຖານການເງິນ ແລະ ຄວາມຮູ້ໃຫ້ກວ້າງຂວາງໄດ້. ເພື່ອບັນລຸໄດ້ຄວາມຕ້ອງການດ້ານການມີສ່ວນຮ່ວມໃນວຽກງານນີ້ ຈຳເປັນຈະຕ້ອງນຳມາພິຈາລະນາກັນ ໃຫ້ລະອຽດເລິກເຊິ່ງ.

ສະຫຼຸບແລ້ວ, ການສຶກສາດ້ານເຕັກນິກ ແລະ ວິຊາຊີບ ກໍ່ຄືການສຶກສາພາກອື່ນໆ ຄວນລວມເອົາການຝຶກອົບຮົມທາງດ້ານການເປັນຜູ້ປະກອບການເຂົ້ານຳ. ນອກຈາກນີ້ແລ້ວ, ຄວາມເອົາໃຈໃສ່ຂອງການຈັດຕັ້ງຕໍ່ການພັດທະນາສົ່ງເສີມທຸລະກິດ ກໍ່ຈະສາມາດຊ່ວຍໃນບັນຫານີ້ໄດ້ ແລະ ວຽກງານນີ້ກໍ່ຍັງມີຄວາມຈຳເປັນທີ່ຈະຕ້ອງໄດ້ສຶກສາຄົ້ນຄິດໃຫ້ເລິກເຊິ່ງຕໍ່ໄປອີກ.

## *ຂໍ້ສະຫຼຸບໂດຍຫຍໍ້:*

*ຕ້ອງປັບປຸງລະບົບການສຶກສາເຕັກນິກ ແລະ ວິຊາຊີບຄືນໃໝ່. ໃນບັນດາບັນຫາທີ່ຕ້ອງໄດ້ນຳມາພິຈາລະນາຄືນໃໝ່ລວມມີ: ຄຸນນະພາບຂອງຫຼັກສູດ, ຄວາມຕ້ອງການພະນັກງານເຕັກນິກຂອງຜູ້ໃຊ້ແຮງງານ, ຄວາມຕ້ອງການ ດ້ານການຝຶກອົບຮົມຂອງແຮງງານ, ການປັບປຸງຫຼັກສູດ ການຮຽນ-ການສອນ, ການຮ່ວມມືກັບສາກົນ, ຄ່າຮຽນ, ພາສາທີ່ໃຊ້ໃນການສິດສອນ, ເງື່ອນໄຂສຳລັບການສະໝັກເຂົ້າຮຽນ ແລະ ການຮ່ວມທຶນກັບພາກເອກະຊົນ.*

## ການໃຫ້ການສຶກສາແກ່ຊາວຜູ້ອອກແຮງງານ: ທາງເລືອກອີກທາງໜຶ່ງ

### ກຸ່ມລູກຄ້າ

ຂໍ້ມູນໃນບົດທີ່ 3 ສະແດງໃຫ້ເຫັນວ່າໃນແຕ່ລະປີມີປະຊາກອນປະມານ 55,000 ຫາ 60,000 ຄົນທີ່ຈະກາຍເປັນກຳລັງແຮງງານ; ປະມານເຄິ່ງໜຶ່ງຂອງກຸ່ມຄົນດັ່ງກ່າວ ແມ່ນເຂົ້າມາສູ່ຂະແໜງກະສິກຳ ແລະ ອີກເຄິ່ງໜຶ່ງແມ່ນເຮັດວຽກກະສິກຳນອກລະດູ ແລະ ວຽກທີ່ບໍ່ແມ່ນກະສິກຳ. ຈາກການຄິດໄລ່ ໂດຍນຳໃຊ້ຂໍ້ມູນຈາກການສຳຫຼວດພົນລະເມືອງ ແລະ ທີ່ຢູ່ອາໄສ, ປະມານ 75% ຂອງກຳລັງແຮງງານໃໝ່ແມ່ນຈົບການສຶກສາພຽງແຕ່ ຊັ້ນປະຖົມສຶກສາ ປີທີ 3 ຫາ ມັດທະຍົມປີທີ 1 ເທົ່ານັ້ນ, ແລະ ມີກຳລັງແຮງງານຕ່ຳກວ່າ 6-7% ຮຽນຈົບດ້ານເຕັກນິກ ແລະ ວິຊາຊີບ ຫຼື ລະດັບປະລິນຍາ. 50% ຂອງກຳລັງແຮງງານທີ່ໄດ້ເຂົ້າໂຮງຮຽນ 5-6 ປີ ແລະ ກຳລັງເຮັດວຽກທີ່ບໍ່ແມ່ນກະສິກຳ ແມ່ນມີຄວາມພ້ອມສຳລັບການຝຶກອົບຮົມດ້ານເຕັກນິກ ແລະ ວິຊາຊີບ ຫຼື ການຊ່າງເພີ່ມເຕີມ. ສ່ວນແຮງງານຈຳນວນທີ່ເຫຼືອແມ່ນຍັງບໍ່ມີຄວາມພ້ອມ ຫຼື ບໍ່ທັນເໝາະສົມຕາມເງື່ອນໄຂ ຫຼື ບໍ່ມີຄວາມສະໝັກໃຈທີ່ຈະຮັບເອົາການຝຶກອົບຮົມ. ເພາະສະນັ້ນ, ຈຳນວນແຮງງານທີ່ຕ້ອງໄດ້ຮັບການຝຶກອົບຮົມເພີ່ມມີປະມານ 10,000 ຄົນ ຕໍ່ປີ. ໃນລັກສະນະດຽວກັນ, ປະມານ 10-12% ຂອງຈຳນວນແຮງງານທີ່ເຮັດວຽກໃນຂະແໜງກະສິກຳ ຄວນໄດ້ຮັບຄັດເລືອກ ໃຫ້ໄປຝຶກອົບຮົມດ້ານເຕັກນິກເພີ່ມເຕີມ, ຊຶ່ງຈຳນວນແຮງງານ ທີ່ຕ້ອງຮັບການຝຶກອົບຮົມຈະຖືກບວກຂຶ້ນຕື່ມປະມານ 2,500 ຄົນ. ດັ່ງນັ້ນ, ຈຳນວນແຮງງານຊາວໜຸ່ມທີ່ຕ້ອງໄດ້ຮັບການຝຶກອົບຮົມ ແມ່ນເພີ່ມຂຶ້ນເປັນ 12,500 ຄົນຕໍ່ປີ. ຖ້າວ່າຂອບເຂດຂອງການຝຶກອົບຮົມ ຫາກໄດ້

127 ເປັນເລື່ອງປົກກະຕິທີ່ຈະເວົ້າວ່າການສຶກສາເຕັກນິກ ແລະ ວິຊາຊີບຄວນເປັນເອກະລາດດ້ານການເງິນ. ແຕ່ສຳລັບປະເທດທຸກຍາກແລ້ວ ຄຳເວົ້ານີ້ອາດບໍ່ທັນສອດຄ່ອງເທື່ອ ທັງນີ້ກໍ່ຍ້ອນວ່າມີພຽງແຕ່ສ່ວນໜ້ອຍໜຶ່ງຂອງສັງຄົມທີ່ສາມາດຮັບພາລະໃນການໃຊ້ຈ່າຍໄດ້. ນອກຈາກນັ້ນ, ໃນຫຼາຍປະເທດຮັ່ງມີ, ງົບປະມານສ່ວນໃຫຍ່ຂອງຂະແໜງການສຶກສານີ້ ແມ່ນມາຈາກພາກລັດ ແລະ ຈາກການບໍລິຈາກ.

ຮັບການຂະຫຍາຍໃຫ້ກວ້າງອອກ ເພື່ອໃຫ້ໂອກາດແກ່ແຮງງານຜູ້ມີອາຍຸແກ່ກວ່າ ກໍ່ຍິ່ງຈະເຮັດໃຫ້ຈຳນວນດັ່ງກ່າວ ເພີ່ມສູງຂຶ້ນອາດຈະປະມານ 2,000 ຫາ 3,000 ຄົນ. ສະນັ້ນ, ຈຶ່ງສາມາດເວົ້າໄດ້ວ່າສິ່ງດັ່ງກ່າວແມ່ນເຫດຜົນພຽງພໍສຳລັບການສ້າງສິ່ງອຳນວຍຄວາມສະດວກ ໃຫ້ແກ່ການສະໜອງການຝຶກອົບຮົມໄລຍະສັ້ນ ຫຼື ໃນລັກສະນະອື່ນໆ ໃຫ້ແກ່ຊາວໜຸ່ມຈຳນວນ 10,000-12,000 ຄົນ ຕໍ່ປີ ເພື່ອໃຫ້ເຂົາເຈົ້າປະສົບຜົນສຳເລັດບໍ່ວ່າຈະເປັນການເຮັດກິດຈະກຳສ້າງລາຍຮັບຂອງຕົນເອງຫຼືເປັນລູກຈ້າງໃຫ້ຄົນອື່ນກໍ່ດີ.

## ການສະໜອງການສຶກສາເຕັກນິກໃນຮູບແບບຕ່າງໆ

ເພື່ອຮັບໃຊ້ໃຫ້ແກ່ກຸ່ມພົນລະເມືອງເຫຼົ່ານີ້ມັນມີຄວາມຈຳເປັນທີ່ຈະຕ້ອງສ້າງວິທີການຕ່າງໆອັນຫຼາກຫຼາຍຂຶ້ນມາ ເພື່ອສະໜອງການສຶກສາດ້ານເຕັກນິກ ແລະ ວິຊາຊີບ ໃຫ້ແກ່ເຂົາເຈົ້າ. ໂຮງຮຽນເຕັກນິກ ແລະ ວິຊາຊີບ ຄວນມີຂະໜາດນ້ອຍ, ແຈກຢາຍຢູ່ທົ່ວທຸກພາກຂອງປະເທດ ແລະ ຕັ້ງຢູ່ໃກ້ກັບບ່ອນທີ່ຄາດວ່າມີກຸ່ມເປົ້າໝາຍອາໄສຢູ່ຫຼາຍ. ທຸກໆຄົນທີ່ຮຽນຈົບພຽງແຕ່ຊັ້ນປະຖົມສົມບູນ ຫຼື ມັດທະຍົມ ປີທີ 1 ທີ່ມີລະດັບການຄົ້ນຄິດໃນລະດັບໃດໜຶ່ງ ແມ່ນມີເງື່ອນໄຂສາມາດໄດ້ຮັບການຝຶກອົບຮົມ. ຂັ້ນຕອນການສະໝັກເຂົ້າໂຮງຮຽນກໍ່ຄວນມີລັກສະນະບໍ່ລວມສູນເພື່ອໃຫ້ແທດເໝາະກັບຄວາມຕ້ອງການຂອງທ້ອງຖິ່ນ. ການຝຶກອົບຮົມອາດຈະຈັດໃຫ້ມີໃນໄລຍະສັ້ນກໍ່ຄື 2-3 ອາທິດ ຫາ 2-3 ເດືອນ ແລະ ຕ້ອງປັບປ່ຽນໄດ້ງ່າຍ; ຕົວຢ່າງ: ຖ້ານັກຮຽນຜູ້ທີ່ລົງທະບຽນເຂົ້າຮັບການຝຶກອົບຮົມຕາມຫຼັກສູດທີ່ມີໄລຍະ 4 ອາທິດ ຫາກມີຄວາມຕ້ອງການທີ່ຈະຮຽນພຽງແຕ່ 3 ອາທິດກ່ອນ ແລ້ວ ພັກຜ່ອນເປັນໄລຍະເວລາໃດໜຶ່ງຈຶ່ງກັບມາຮຽນອາທິດທີ່ 4 ຕໍ່, ລະບົບຫຼັກສູດກໍ່ຄວນພິຈາລະນາຄວາມເປັນໄປໄດ້ດັ່ງກ່າວ. ການສອນຫ້ອງຮຽນພາກຄ່ຳ ແລະ ທ້າຍອາທິດກໍ່ແມ່ນທາງເລືອກທີ່ເປັນໄປໄດ້. ຫຼັກສູດການຮຽນ-ການສອນ ຄວນມີລັກສະນະຕົວຈິງ, ດັດປັບໄດ້ ແລະ ມີລາຄາຖືກ. ສ່ວນຫຼັກສູດການຮຽນນີ້ ກໍ່ຄວນເສີມສ້າງໃຫ້ຜູ້ທີ່ເຂົ້າຮັບການຝຶກອົບຮົມ ສາມາດອອກໄປດຳເນີນກິດຈະກຳສ້າງລາຍຮັບຂອງຕົນເອງ ແລະ ທັງໄປເຮັດວຽກບໍລິການຮັບຈ້າງໃຫ້ແກ່ຜູ້ອື່ນໄດ້.

ຫົວຂໍ້ວິຊາຕ່າງໆທີ່ສາມາດຈັດຝຶກອົບຮົມໃຫ້ເຂົາເຈົ້າລວມມີດັ່ງນີ້:

1. ວິຊາກົນຈັກ (ສ້ອມແປງຈັກດູດນ້ຳ, ຕາບຢາງລົດ ແລະ ເຄື່ອງຈັກບາງປະເພດ),

2. ວິຊາໄຟຟ້າ (ສ້ອມແປງການເຊື່ອມຕໍ່ໄຟຟ້າ, ສ້ອມແປງໝໍ້ໄຟ, ຄຽນໄດເຄື່ອງຈັກ ຫຼື ເຄື່ອງກຳເນີດໄຟຟ້າ/ດີນາໂມ ແລະ ເຄື່ອງໃຊ້ໄຟຟ້າທົ່ວໄປ ເຊັ່ນ ສ້ອມແປງວິທະຍຸ, ໂທລະພາບ ຫຼື ໂທລະສັບຕັ້ງໂຕະເປັນຕົ້ນ),

3. ການສ້ອມແປງຂັ້ນພື້ນຖານລົດບັນທຸກ, ລົດໂດຍສານ ແລະ ລົດໃຫຍ່ທົ່ວໄປ,

4. ການເຊື່ອມ, ການເຄາະ ແລະ ພົ່ນສີໂລຫະ,

5. ກິດຈະກຳການກໍ່ສ້າງຕ່າງໆ,

6. ວຽກໄມ້ ແລະ ວິຊາຊ່າງໄມ້,

7. ການຕັດຫຍິບເສື້ອຜ້າ ແລະ ຖັກແສ່ວ,

8. ບໍລິຫານຄຸ້ມຄອງການເງິນ (ໂດຍສະເພາະແມ່ນເພື່ອສ້າງຄວາມເຂັ້ມແຂງໃຫ້ແກ່ກອງທຶນພັດທະນາບ້ານ), ການຕະຫຼາດ, ການຈັດອົງກອນ, ການບໍລິການສົ່ງໜັງສື, ການບໍລິຫານ, ການເບິ່ງແຍງສ່ວນບຸກຄົນ, ແລະ ອື່ນໆ,

9. ກິດຈະກຳທີ່ພົວພັນກັບການທ່ອງທ່ຽວ,

10. ການລ້ຽງສັດ, ການປຸງແຕ່ງອາຫານ, ການເກັບຮັກສາຊີ້ນ, ປາ, ໝາກໄມ້, ແລະ ອື່ນໆ, ແລະ

11. ການຜະລິດກະສິກຳແບບວິທະຍາສາດ ແລະ ວິທີການຜະລິດກະສິກຳແບບໃໝ່.

ນອກຈາກທີ່ກ່າວມາຂ້າງເທິງແລ້ວນັ້ນກໍ່ຍັງມີອີກຫຼາຍວິຊາຝຶກອົບຮົມຊຶ່ງສາມາດຂະຫຍາຍລົງເລິກສະເພາະຕາມແຕ່ລະວິຊາຮຽນໄດ້.

## ສູນຝຶກອົບຮົມ

1. ຄວນສ້າງຕັ້ງສູນຝຶກອົບຮົມຂຶ້ນ ເພື່ອສະໜອງການຝຶກອົບຮົມຕາມຄວາມຕ້ອງ ໃນການນຳໃຊ້ເຄື່ອງຈັກ ຫຼື ພາກປະຕິບັດຕົວຈິງ. ສູນຝຶກອົບຮົມເຫຼົ່ານີ້ ຍັງສາມາດນຳໃຊ້ເປັນສູນໃຫ້ບໍລິການໄດ້ເຊັ່ນດຽວກັນ ເພື່ອໃຫ້ບໍລິການແກ່ກຸ່ມລູກຄ້າ. ການເຮັດໜ້າທີ່ສະໜອງການຝຶກອົບຮົມ ແລະ ການບໍລິການຂອງສູນນີ້ຈະຊ່ວຍໃຫ້ສູນສາມາດປະເມີນຄວາມຕ້ອງການໃນດ້ານການຝຶກອົບຮົມ ແລະ ທັງສ້າງລາຍຮັບໃຫ້ແກ່ສູນນຳອີກດ້ວຍ. ສູນດັ່ງກ່າວນີ້ຄວນຈັດໃຫ້ມີພະນັກງານປະຈຳ. ສູນແຫ່ງນີ້ສາມາດນຳເອົາແຮງງານໃນຂະແໜງວິຊາ ທີ່ພວກເຂົາຂາດຄວາມຮູ້ມາໃຫ້ການຝຶກອົບຮົມ ແລ້ວກັບຄືນໄປເຮັດວຽກງານຕາມທີ່ພວກເຂົາໄດ້ຮັບການອົບຮົມມານັ້ນ.

2. ໃນບາງກໍລະນີ ທີ່ແຮງງານຫາກມີຄວາມຫຍຸ້ງຍາກ ໃນການເດີນທາງ (ເຊັ່ນ ເຂດພູດອຍ, ຢູ່ພາຍໃຕ້ການເບິ່ງແຍງຂອງຜູ້ປົກຄອງ ຫຼື ບໍ່ສາມາດພັກວຽກໄດ້ ແລະ ອື່ນໆ) ສູນກໍ່ສາມາດຈັດຕັ້ງການຝຶກແບບເຄື່ອນໃຫ້ແກ່ເຂົາເຈົ້າໄດ້. ສິ່ງອຳນວຍຄວາມສະດວກ ໃນການຝຶກອົບຮົມແບບເຄື່ອນທີ່ ອາດຈະປະກອບໃສ່ໃນລົດບັນທຸກທີ່ສາມາດເຄື່ອນທີ່ຈາກກຸ່ມບ້ານໜຶ່ງໄປຫາອີກກຸ່ມບ້ານໜຶ່ງ ຫຼື ຈາກຕົວເມືອງໜຶ່ງໄປຫາອີກຕົວເມືອງໜຶ່ງ ຕາມວັນເວລາທີ່ໄດ້ປະກາດໃຫ້ຊາບລ່ວງໜ້າ. ຄວາມຈິງແລ້ວ, ການຝຶກອົບຮົມແບບເຄື່ອນທີ່ ມີໄລຍະການຝຶກອົບຮົມສັ້ນ ແຕ່ມີຜົນດີຢູ່ທີ່ວ່າການຝຶກອົບຮົມແບບນີ້ ເປັນການຝຶກອົບຮົມກັບວຽກງານຕົວຈິງ. ຜົນດີອີກອັນໜຶ່ງກໍ່ຄືຜູ້ໃຫ້ການຝຶກອົບຮົມ ສາມາດຄົ້ນພົບບັນຫາຕົວຈິງ ທີ່ແຮງງານພົບພໍ້ ແລະ ສາມາດໃຫ້ຂໍ້ແນະນຳແກ່ຜູ້ເຂົ້າຮັບການອົບຮົມເພື່ອແກ້ໄຂບັນຫາດັ່ງກ່າວໄດ້ກັບທີ່.

3. ໃນບາງກໍລະນີ, ມີພຽງແຕ່ຄູຝຶກ (ໂດຍບໍ່ມີອຸປະກອນ) ກໍ່ສາມາດເຮັດໄດ້. ຍົກຕົວຢ່າງ ໃນ ໂຄງການທີ່ພົວ ພັນກັບການຜະລິດກະສິກຳແບບວິທະຍາສາດ, ການລ້ຽງສັດ, ການປຸງແຕ່ງອາຫານ, ການຂາຍເຄື່ອງຍ່ອຍ ແລະ ອື່ນໆ ຄູຝຶກພຽງແຕ່ເດີນທາງໄປບ້ານ ຫຼື ໄປຕົວເມືອງເພື່ອສະໜອງການຝຶກອົບຮົມທີ່ຈຳເປັນ.

ຂໍ້ຄວນເອົາໃຈໃສ່: ໃນການປະຕິບັດຕົວຈິງທີ່ດີນັ້ນ, ການເນັ້ນໜັກໃສ່ແຂວງຫ່າງໄກສອກຫຼີກ ຈະເປັນການຊ່ວຍຊຸກຍູ້ທາງດ້ານຫວັດດີການອັນດີໄປພ້ອມ. ກ່ຽວກັບບັນຫານີ້, ຖ້າຫາກຈັດຕັ້ງສູນຝຶກອົບ

ຣົມເຫຼົ່ານີ້ ໃນ 47 ຕົວເມືອງບູລິມະສິດ (ໃນລະດັບຂັ້ນບ້ານ ເຊັ່ນ ກຸ່ມບ້ານພັດທະນາເປັນຕົ້ນ) ຈະສາມາດເຮັດໃຫ້ວຽກງານນີ້ປະກົດຜົນເປັນຈິງໄດ້.

## *ສະຫຼຸບຫຍໍ້:*

*ຫຼັກສູດການສຶກສາເຕັກນິກ ແລະ ວິຊາຊີບໄລຍະສັ້ນສາມາດຕອບສະໜອງຄວາມຕ້ອງການຂອງຕະຫຼາດແຮງງານໄດ້. ສິ່ງສຳຄັນກໍ່ຄືຕ້ອງອອກແບບຫຼັກສູດທີ່ມີລັກສະນະຄົ້ນຄິດປະດິດສ້າງ, ສະເພາະເຈາະຈົງຕໍ່ນັກຮຽນຜູ້ທີ່ບໍ່ໄດ້ຮັບການສຶກສາສາມັນຍ້ອນສາຍເຫດໃດໜຶ່ງ. ຫຼັກສູດຝຶກອົບຮົມຄວນໃຊ້ເວລາສັ້ນ, ສາມາດປະຕິບັດຕົວຈິງໄດ້, ບໍ່ແພງ, ເຂົ້າເຖິງໄດ້ ແລະ ມີລັກສະນະດັດປັບໄດ້ງ່າຍ.*

## ປັບປຸງລະດັບຄວາມສາມາດຂອງມະນຸດ ໂດຍຜ່ານການພັດທະນາທຸລະກິດ ແລະ ການພັດທະນາຊຸມຊົນ

### ການບໍລິການດ້ານການພັດທະນາທຸລະກິດ

ການສຶກສາບໍ່ຄວນຈະຈຳກັດໃສ່ແຕ່ຜູ້ທີ່ເຂົ້າມາດຳເນີນທຸລະກິດໃໝ່ເທົ່ານັ້ນ. ມີຄວາມຈຳເປັນ ແລະ ຄວາມເປັນໄປໄດ້ທີ່ຈະເພີ່ມທະວີຄວາມເຂັ້ມແຂງໃນການສ້າງລາຍຮັບຂອງປະຊາຊົນໂດຍຜ່ານການປັບປຸງທຸລະກິດຂອງເຂົາເຈົ້າ, ຜ່ານການຂະຫຍາຍການບໍລິການດ້ານເຕັກໂນໂລຊີ, ເຄື່ອງມືທາງດ້ານກົດໝາຍ ແລະ ການຄ້າ, ໂດຍສະເພາະກໍ່ແມ່ນ ທຸລະກິດຂະໜາດນ້ອຍ ແລະ ຈຸລະພາກ. ສິ່ງເຫຼົ່ານີ້ ສາມາດບັນລຸໄດ້ໂດຍຜ່ານການສ້າງຕັ້ງໜ່ວຍບໍລິການພັດທະນາທຸລະກິດ.

ໜ່ວຍບໍລິການພັດທະນາທຸລະກິດລວມມີບໍລິການດ້ານການຝຶກອົບຮົມ, ການໃຫ້ຄຳປຶກສາ ແລະ ຄຳແນະນຳ, ການຊ່ວຍເຫຼືອທາງດ້ານການຕະຫຼາດ, ຂໍ້ມູນຂ່າວສານ, ພັດທະນາ ແລະ ຖ່າຍທອດເຕັກໂນໂລຊີ, ການສົ່ງເສີມການເຊື່ອມຕໍ່ດ້ານທຸລະກິດ ແລະ ອື່ນໆ. ໜ່ວຍບໍລິການພັດທະນາທຸລະກິດ ສາມາດເປັນໄດ້ທັງສອງລັກສະນະ ກໍ່ຄື ທັງທາງດ້ານການເຄື່ອນໄຫວດຳເນີນທຸລະກິດ ແລະ ທາງດ້ານຍຸດທະສາດ. ການບໍລິການທີ່ຊ່ວຍໃນການເຄື່ອນໄຫວດຳເນີນທຸລະກິດ ແມ່ນການບໍລິການທີ່ຈຳເປັນ ແລະ ຕ້ອງໄດ້ປະຕິບັດທຸກໆມື້. ສ່ວນການບໍລິການ ດ້ານຍຸດທະສາດແມ່ນຈຳເປັນສຳລັບການວາງແຜນ ແລະ ການຂະຫຍາຍທຸລະກິດໃນໄລຍະກາງ ແລະ ໄລຍະຍາວ. ໜ່ວຍບໍລິການພັດທະນາທຸລະກິດ ສາມາດເປັນໜ່ວຍໃຫ້ບໍລິການຢ່າງດຽວ ຫຼື ໃຫ້ບໍລິການເປັນຊຸດການບໍລິການ; ການຕັດສິນໃຈ ໃຫ້ບໍລິການແບບນີ້ແມ່ນຂຶ້ນກັບຄວາມຕ້ອງການຂອງຕະຫຼາດ.

ຜູ້ທີ່ມີສ່ວນກ່ຽວຂ້ອງ ໃນການບໍລິການ ດ້ານການພັດທະນາທຸລະກິດແມ່ນພາກສ່ວນເອກະຊົນ (ລູກຄ້າ), ຜູ້ອຳນວຍຄວາມສະດວກ (ທີ່ປຶກສາ, ຜູ້ໃຫ້ຄຳແນະນຳດ້ານນະໂຍບາຍ), ຜູ້ສະໜອງ (ຜູ້ຍົກຍືນສິນຄ້າບໍລິການ, ຜູ້ສະໜອງເຕັກໂນໂລຊີ, ຜູ້ແກ້ໄຂບັນຫາ, ຄູຝຶກອົບຮົມ) ແລະ ຜູ້ໃຫ້ການຊ່ວຍເຫຼືອ ຫຼື ລັດຖະບານ. ສາຍພົວພັນລະຫວ່າງພາກສ່ວນທີ່ກ່ຽວຂ້ອງມີດັ່ງນີ້:

**ຜູ້ໃຫ້ການຊ່ວຍເຫຼືອ/ລັດຖະບານ ➔ ຜູ້ອຳນວຍຄວາມສະດວກ ➔ ຜູ້ສະໜອງ ➔ ລູກຄ້າ**

128 ສຳລັບລາຍລະອຽດໃຫ້ເບິ່ງ: World Bank (2001); ILO (2001).

ລູກຄ້າຈ່າຍຄ່າການນຳໃຊ້ການບໍລິການ, ສ່ວນຜູ້ສະໜອງ ແມ່ນໜ່ວຍງານເອກະຊົນ ທີ່ໃຫ້ການບໍລິການ ເພື່ອຜົນກຳໄລໂດຍບໍລິການຕາມຄວາມຕ້ອງການຂອງຕະຫຼາດ, ສ່ວນຜູ້ໃຫ້ການຊ່ວຍເຫຼືອ, ອົງການບໍ່ແມ່ນລັດຖະບານ ເປັນຜູ້ສະໜັບສະໜູນໃຫ້ແກ່ຜູ້ອຳນວຍຄວາມສະດວກໃນໄລຍະຕົ້ນຂອງການພັດທະນາ. ໃນບາງປະເທດ, ໜ່ວຍງານພິເສດຂອງທະນາຄານ ຫຼື ເອີ້ນວ່າ ໜ່ວຍງານພັດທະນາພິເສດມີໜ້າທີ່ໃຫ້ການບໍລິການໃນດ້ານດັ່ງກ່າວນີ້.

ນອກຈາກນັ້ນ, ຍັງມີການບໍລິການດ້ານອື່ນໆອີກທີ່ພາກລັດ ແລະ ຜູ້ໃຫ້ການຊ່ວຍເຫຼືອສາມາດສະໜອງໃຫ້ ເພື່ອສົ່ງເສີມພາກເອກະຊົນໂດຍທີ່ການຊ່ວຍເຫຼືອນັ້ນບໍ່ຈຳເປັນຈະຕ້ອງແມ່ນການອຸດໜູນໂດຍກົງ ຫຼື ການໃຫ້ເງິນຊ່ວຍເຫຼືອ. ການບໍລິການເຫຼົ່ານີ້ອາດແມ່ນການຝຶກອົບຮົມ (ຝຶກອົບຮົມ ແລະ ປະຕິບັດຕົວຈິງໄປພ້ອມໆກັນ ຫຼື ອາດຈະເປັນແບບທິດສະດີ), ການໃຫ້ການສະໜັບສະໜູນດ້ານການສ້າງພື້ນທີ່ອຸດສາຫະກຳ ຫຼື ເຕັກໂນໂລຊີ ຫຼື ສ້າງສິ່ງອຳນວຍຄວາມສະດວກທີ່ສາມາດໃຊ້ຮ່ວມກັນໄດ້ ເຊັ່ນ ຕູ້ແຊ່ແຂງສຳລັບຄົນຫາປາລາຍຍ່ອຍ, ຊ່ວຍສ້າງສູນອອກແບບທົ່ວໄປສຳລັບໂຮງງານຕັດຫຍິບ/ເຄື່ອງໜັງ ຫຼື ການຊ່ວຍສ້າງຕັ້ງສະມາຄົມນັກທຸລະກິດ[128].

### ການພັດທະນາຊຸມຊົນ

1. ການພັດທະນາຊຸມຊົນ (CD) ໝາຍເຖິງການດຳເນີນງານແບບລວມໝູ່ເພື່ອໃຫ້ມີການປ່ຽນແປງທາງສັງຄົມ, ມີການພັດທະນາ ແລະ ມີວຽກເຮັດງານທຳ. ພື້ນຖານຂອງການພັດທະນາຊຸມຊົນປະກອບດ້ວຍແນວຄວາມຄິດແຫ່ງຄວາມສະເໝີພາບ ແລະ ການມີສ່ວນຮ່ວມຂອງສະມາຊິກຢູ່ໃນຊຸມຊົນ. ການພັດທະນາຊຸມຊົນຊ່ວຍເພີ່ມທະວີຄວາມເຊື່ອໝັ້ນຂອງປະຊາຊົນ ແລະ ສ້າງຄວາມຮັບຮູ້ໃຫ້ເຂົາເຈົ້າຕໍ່ກັບສິດຂອງຕົນເອງເຊັ່ນກັນ ສິດໃນດ້ານການດຳລົງຊີວິດຮ່ວມກັນ. ວິທີການການພັດທະນາຊຸມຊົນ ສາມາດນຳໃຊ້ກັບບ້ານ ແລະ ກຸ່ມຄົນທີ່ມີລາຍຮັບຕ່ຳຊຶ່ງສາມາດປະຕິບັດໄດ້ດັ່ງລຸ່ມນີ້: ກຳນົດຄວາມຕ້ອງການ, ໂອກາດ, ສິດ ແລະ ໜ້າທີ່ຮັບຜິດຊອບຂອງທ້ອງຖິ່ນ;

2. ການວາງແຜນ, ການຈັດຕັ້ງ, ແລະ ການປະຕິບັດ;

3. ການປະເມີນປະສິດທິຜົນແລະຜົນກະທົບຂອງການປະຕິບັດ; ແລະ,

4. ການແບ່ງປັນຜົນປະໂຫຍດທີ່ໄດ້ຮັບ.

ການຝຶກອົບຮົມກ່ຽວກັບການພັດທະນາຊຸມຊົນແມ່ນການສິດສອນທີ່ສາມາດປະຕິບັດຕົວຈິງໄດ້. ຫຼັກສູດທີ່ເປັນໃຈກາງສຳຄັນ ຂອງການພັດທະນາຊຸມຊົນລວມມີການຖ່າຍທອດຄວາມຮູ້ດ້ານຄວາມຕ້ອງການ ແລະ ຜົນປະໂຫຍດ ຂອງການຈັດຕັ້ງປະຕິບັດຮ່ວມກັນກໍ່ຄືການຝຶກອົບຮົມກ່ຽວກັບການເຮັດວຽກຮ່ວມກັນ ແລະ ການແບ່ງ ຄວາມຮັບຜິດຊອບໃນໜ້າວຽກ ແລະ ຂັ້ນຕອນຂອງຂະບວນການຕັດສິນໃຈ ດ້ານການແບ່ງປັນຜົນປະໂຫຍດຮ່ວມກັນ. ການຝຶກອົບຮົມດ້ານການພັດທະນາຊຸມຊົນຈະບໍ່ແມ່ນການຝຶກອົບຮົມຢູ່ໃນຫ້ອງຮຽນແຕ່ຈະເປັນ ການຝຶກອົບຮົມຢູ່ກັບບ້ານ/ຊຸມຊົນເອງ. ບົດບາດຂອງຄູຝຶກ ແມ່ນຄ້າຍຄືກັບພະນັກງານສົ່ງເສີມກະສິກຳ.

ການຝຶກອົບຮົມການພັດທະນາຊຸມຊົນໃນ ສປປ ລາວ ດີທີ່ສຸດຢູ່ໃນຂັ້ນບ້ານ ແລະ ກຸ່ມບ້ານແມ່ນຈັດຕັ້ງປະຕິບັດ ໂດຍກະຊວງກະສິກຳ ແລະ ໃນຂັ້ນເມືອງ ແມ່ນຈັດຕັ້ງໂດຍ ກະຊວງແຮງງານ ແລະ ສະຫວັດດີການສັງຄົມ ໂດຍການຮ່ວມມືກັບອຳນາດການປົກຄອງທ້ອງຖິ່ນ.

**ຕົວຢ່າງ 1: ການນຳໃຊ້ການພັດທະນາຊຸມຊົນເຂົ້າໃນການຂີດເອົານ້ຳຢາງ**

ໃນສອງສາມປີຜ່ານມາ, ລາວເຮົາໄດ້ລິເລີ່ມການປູກຕົ້ນຢາງກະຕັງກະຕິ້ວໃນເນື້ອທີ່ອັນກວ້າງຂວາງ. ກະຊວງກະສິກຳ ຄາດຄະເນວ່າ ເນື້ອທີ່ສັບຊ່າວ ເພື່ອປູກຕົ້ນຢາງກະຕັງກະຕິ້ວ ມີປະມານ 150,000-180,000 ເຮັກຕາ ຊຶ່ງສ່ວນໃຫຍ່ກໍ່ແມ່ນ ສວນປູກຂະໜາດໃຫຍ່[129]. ຕົ້ນຢາງກະຕັງກະຕິ້ວຈະໃຊ້ເວລາປະມານ 6-8 ປີ ຈຶ່ງຈະສາມາດໃຫ້ຜົນຜະລິດໄດ້. ຄວາມຕ້ອງການແຮງງານເພື່ອເກັບນ້ຳຢາງຈາກ ຕົ້ນຢາງກະຕັງກະຕິ້ວ ຈະມີໃນໄລຍະເດືອນກໍລະກົດ/ສິງຫາ ໄປຮອດ ເດືອນພະຈິກ/ທັນວາ ໂດຍການຂີດຕົ້ນຢາງ ຊຶ່ງເປັນບ່ອນນ້ຳຢາງໄຫຼອອກມາ. ໂດຍທົ່ວໄປແລ້ວ, ສວນຢາງກະຕັງກະຕິ້ວໃນເນື້ອທີ່ 1 ເຮັກຕາຕ້ອງການແຮງງານ 13 ຄົນ ໂດຍຂຶ້ນກັບຄວາມຫ່າງຂອງການປູກ ແລະ ແຮງງານຕ້ອງໄດ້ເຮັດວຽກຕະຫຼອດຄືນ. ແຮງງານທີ່ຕ້ອງການ ເພື່ອມາເກັບກູ້ເອົາຢາງ ຄາດວ່າຈະມີປະມານ 250,000-300,000 ຄົນ ໂດຍຈະໃຊ້ເວລາ 3 ຫາ 4 ເດືອນ ເລີ່ມແຕ່ປີ 2011-12. ຄ່າຮງງານໃນການເກັບກູ້ເອົາຢາງນີ້ ກໍ່ບໍ່ແຕກຕ່າງຈາກການເຮັດວຽກໃຫ້ແກ່ການຜະລິດກະສິກຳປະເພດອື່ນ. ໃນລະດູການຜະລິດເຂົ້ານາປີ, ບໍ່ໜ້າເປັນໄປໄດ້ທີ່ຊາວນາຈະຢຸດເຊົາການຜະລິດເຂົ້າຂອງຕົນ ເພື່ອມາຂີດຢາງ. ສະນັ້ນ, ຈຶ່ງເປັນການເປີດໂອກາດໃຫ້ແກ່ການເຄື່ອນຍ້າຍແຮງງານຈາກປະເທດອື່ນ ເຂົ້າມາປະເທດເຮົາ ເພື່ອດຸ່ນດ່ຽງລະຫວ່າງຄວາມຕ້ອງການ ແລະ ການສະໜອງແຮງງານ.

ວິທີການໜຶ່ງ ກໍ່ຄືບໍລິສັດເຮັດສັນຍາຂີດຢາງ ກັບບັນດາບ້ານທີ່ຢູ່ອ້ອມຂ້າງເຂດສວນປູກຕົ້ນຢາງບົນພື້ນຖານ ການແບ່ງປັນຜົນກຳໄລ. ການຂີດເອົານ້ຳຢາງເປັນວຽກໜຶ່ງທີ່ບໍ່ຫຍຸ້ງຍາກ, ນາຍບ້ານສາມາດລະດົມແຮງງານ ຈາກບ້ານຂອງຕົນໄປຮັບການຝຶກອົບຮົມກ່ຽວກັບການຂີດເອົານ້ຳຢາງ. ຫຼັງຈາກຜ່ານການຝຶກອົບຮົມຂັ້ນຕົ້ນແລ້ວກໍ່ມອບໝາຍໃຫ້ເຂົາເຈົ້າໄປເຮັດວຽກດັ່ງກ່າວນີ້. ການປະຕິບັດວິທີການພັດທະນາຊຸມຊົນ ຈະເປັນປະໂຫຍດສຳລັບການລະດົມແຮງງານຕາມລະດູການຄືແນວນີ້.

**ຕົວຢ່າງ. 2: ນອກຈາກຕົ້ນຢາງກະຕັງກະຕິ້ວ**

ການພັດທະນາຊຸມຊົນກໍ່ສາມາດມີປະສິດທິພາບໃນຂະແໜງອື່ນ. ສະມາຄົມຜູ້ປູກກາເຟກໍ່ມີຢູ່ແລ້ວ ຊຶ່ງມີບົດບາດໃນການຕໍ່ລອງລາຄາສຳລັບເມັດກາເຟດິບ ທີ່ພວກເຂົາເຈົ້າຂາຍໃຫ້ແກ່ພໍ່ຄ້າ. ນັກວິໄຈນະໂຍບາຍບາງຄົນເຫັນວ່າ ຄວນມີສະມາຄົມຜູ້ປູກສາລີ, ສະມາຄົມຜູ້ປູກຜັກ ແລະ ສະມາຄົມຜູ້ປູກເຂົ້າເພື່ອການຕໍ່ລອງລາຄາໃຫ້ໄດ້ດີ ແລະ ການຮ່ວມມື ເພື່ອເຮັດນາແບບມີສັນຍາ, ການແບ່ງປັນວິທີການດ້ານເຕັກໂນໂລຊີ ແລະ ອື່ນໆ. ສະຫຼຸບແລ້ວ, ວິທີການພັດທະນາຊຸມຊົນເປັນວິທີການ ທີ່ສາມາດຊອກຫາວິທີການ ເພື່ອຮອງຮັບແຮງງານສຳລັບກິດຈະກຳການຜະລິດກະສິກຳນອກລະດູ ແລະ ກິດຈະກຳທີ່ບໍ່ແມ່ນກະສິກຳໃນເຂດຊົນນະບົດ ແລະ ເຂດຕົວເມືອງ.

## *ຂໍ້ສະຫຼຸບໂດຍຫຍໍ້:*

*ໜ້າທີ່ຮັບຜິດຊອບຕໍ່ການຖ່າຍທອດທັກສະສີມືນັ້ນ ບໍ່ຄວນຈະຈຳກັດຢູ່ໃນແຕ່ລະບົບການສຶກສາ ພຽງຢ່າງດຽວ. ການຖ່າຍທອດທັກສະສີມືນີ້ ຄວນຈະໄດ້ຮັບການຜັນຂະຫຍາຍໄປສູ່ການຝຶກອົບຮົມໃນພາກປະຕິບັດຕົວຈິງ ໃຫ້ແກ່ພາກທຸລະກິດ ແລະ ການເຮັດວຽກເປັນກຸ່ມເຊັ່ນດຽວກັນ ການບໍລິການດ້ານການພັດທະນາທຸລະກິດຍັງເປັນປະໂຫຍດຕໍ່ການສ້າງຄວາມເຂັ້ມແຂງ ໃຫ້ແກ່ຫົວໜ່ວຍທຸລະກິດຂະໜາດຈຸລະພາກ ແລະ ຂະໜາດນ້ອຍ. ການພັດທະນາຊຸມຊົນສາມາດເພີ່ມທາງເລືອກດ້ານວຽກເຮັດງານທຳໃໝ່ ແລະ ລາຍຮັບໃຫ້ແກ່ບ້ານ ແລະ ຂະແໜງວຽກຂັ້ນຕ່ຳຂອງຊຸມຊົນໃນຕົວເມືອງ.*

## ໂຮງຮຽນບໍ່ແຮ່ ແລະ ທໍລະນີສາດ

ຢ່າງຊ້າສຸດໃນໄລຍະ 2-3 ທົດສະວັດຕໍ່ໜ້ານີ້ ວຽກງານບໍ່ແຮ່ຈະກາຍເປັນກິດຈະກຳເສດຖະກິດຕົ້ນຕໍໃນລາວເຮົາ. ປະເທດທີ່ພັດທະນາແລ້ວ ຫຼື ປະເທດທີ່ມີພື້ນຖານເສດຖະກິດ ໂດຍອີງໃສ່ໜຶ່ງ ຫຼື ສອງກິດຈະກຳສຳຄັນເປັນຫຼັກ ເຊັ່ນ ກິດຈະກຳບໍ່ແຮ່ນັ້ນມັກຈະມີແນວໂນ້ມໃນການພັດທະນາຄວາມຊຳນານງານໃນກິດຈະກຳເຫຼົ່ານັ້ນ. ໂຮງຮຽນບໍ່ແຮ່ ແລະ ທໍລະນີສາດຈະຊ່ວຍຝຶກຝົນພະນັກງານໃນຫຼາຍໆດ້ານ ເພື່ອໃຫ້ເຂົາເຈົ້າຮັກສາສັດສ່ວນຂອງມູນຄ່າເພີ່ມພາຍໃນປະເທດ ໃຫ້ຫຼາຍຂຶ້ນ ແລະ ທັງເປັນການສ້າງວຽກເຮັດງານທຳໂດຍກົງ ແລະ ທາງອ້ອມ.

1. ຜູ້ຊ່ຽວຊານດ້ານທໍລະນີສາດ ສາມາດຊ່ວຍໃຫ້ອຳນາດການປົກຄອງຮູ້ໄດ້ຢ່າງຊັດເຈນວ່າ ປະລິມານຂອງບໍ່ແຮ່ມີເທົ່າໃດ, ຢູ່ໃສ, ແລະ ໃນຮູບລັກສະນະແນວໃດຊຶ່ງສິ່ງເຫຼົ່ານີ້ຈະຊ່ວຍຫຼຸດຜ່ອນການເອື່ອຍອີງໃສ່ບໍລິສັດຕ່າງປະເທດໃນການສະໜອງຂໍ້ມູນດັ່ງກ່າວ.

2. ຂໍ້ມູນກ່ຽວກັບຂໍ້ (1) ຈະຊ່ວຍໃນການເຈລະຈາຂໍ້ຕົກລົງກັບບໍລິສັດເອກະຊົນ ຊຶ່ງຈະເປັນຜົນປະໂຫຍດ ໃຫ້ແກ່ລາວເຮົາຫຼາຍກວ່າ.

3. ໃນໄລຍະກາງ ຍັງມີຄວາມເປັນໄປໄດ້ ທີ່ບໍລິສັດລາວເຮົາຈະສາມາດເຮັດການຂຸດຄົ້ນບໍ່ແຮ່ ໂດຍປາດສະຈາກ ການເຂົ້າຮ່ວມຂອງບໍລິສັດຕ່າງປະເທດ.

4. ຄວາມຮູ້ກ່ຽວກັບແຮ່ທາດ ແລະ ການປຸງແຕ່ງໂລຫະ ຈະຊ່ວຍໃນການພັດທະນາ ວິສາຫະກິດຂະໜາດນ້ອຍ ແລະ ກາງ (SMEs) ໃຫ້ກາຍເປັນອຸດສາຫະກຳເຊື່ອມຕໍ່ ກໍ່ຄືການປຸງແຕ່ງແຮ່ທາດຕາມທີ່ໄດ້ສະເໜີມາແລ້ວຢູ່ ໃນບົດທີ 3.

ຜົນໄດ້ຮັບຈາກໂຮງຮຽນດັ່ງກ່າວ ແມ່ນມີຢ່າງຫຼວງຫຼາຍແບບທະວີຄູນຊຶ່ງບໍ່ສາມາດຄິດໄລ່ໄດ້ໃນໄລຍະນີ້. ນອກຈາກນັ້ນກໍ່ຍັງຈະຊ່ວຍຫຼຸດຜ່ອນຄຳວິພາກວິຈານທີ່ວ່າ ປະເທດນ້ອຍ ບໍ່ສາມາດໄດ້ຮັບຜົນປະໂຫຍດຈາກ ຊັບພະຍາກອນ ດ້ານບໍ່ແຮ່ ທີ່ຕົນເອງມີ. ສຳລັບຂະໜາດຂອງໂຮງຮຽນນັ້ນ ຈະຕ້ອງໄດ້ນຳມາພິຈາລະນາ ໂດຍຜ່ານຂັ້ນຕອນການສຶກສາຢ່າງລະອຽດວ່າ ສະຖາບັນດັ່ງກ່າວຄວນ

129 ສະຖາບັນຄົ້ນຄວ້າເສດຖະກິດແຫ່ງຊາດ ໄດ້ນຳໃຊ້ຕົວເລກນີ້ ບົນພື້ນຖານການຄາດຄະເນຂອງກະຊວງກະສິກຳ, Vientiane Times ສະບັບວັນທີ 8 ມັງກອນ, 2009..

ເປັນຄະນະວິຊາ ໜຶ່ງຂອງມະຫາວິທະຍາໄລແຫ່ງຊາດ ຫຼື ຄວນຈະເປັນໂຮງຮຽນນ້ອຍທີ່ເປັນເອກະລາດ ຫຼື ເປັນການປະສົມປະສານກັນທັງສອງ ຢ່າງ.

## ຂໍ້ສະເໜີແນະຕົ້ນຕໍ

1. ຄວນເພີ່ມການລົງທຶນໃສ່ ວຽກງານການສຶກສາ ໃຫ້ທຽບເທົ່າກັບບາງປະເທດເຊັ່ນ ມາເລເຊຍ, ເກົາຫຼີ ຊຶ່ງຢູ່ໃນລະດັບ 6-8% ຂອງລວມຍອດຜະລິດຕະພັນພາຍໃນ (GDP).

2. ວິທີການໃໝ່ທີ່ມີຫົວຄິດປະດິດສ້າງ ເພື່ອເພີ່ມອັດຕາການເຂົ້າໂຮງຮຽນ ໄດ້ແກ່ການຈັດຕັ້ງປະຕິບັດ ການສິດສອນຫ້ອງຄວບ, ການສ້າງຕັ້ງກຸ່ມໂຮງຮຽນ, ການຊ່ວຍເຫຼືອນັກຮຽນຜູ້ທີ່ຮຽນບໍ່ທັນໝູ່ ໂດຍຜ່ານການບຳລຸງພິເສດ, ປະຕິບັດໂຄງການອາຫານກາງເວັນສຳລັບໂຮງຮຽນ, ນຳໃຊ້ການບໍລິການຂອງຊາວໜຸ່ມຜູ້ທີ່ມີການສຶກສາໃນລະດັບໃດໜຶ່ງ ເຊັ່ນ ຊ່ວຍແປພາສາໃຫ້ແກ່ນັກຮຽນຜູ້ທີ່ເວົ້າພາສາລາວບໍ່ໄດ້ ແລະ ສະໜອງສິ່ງຈູງໃຈໃຫ້ແກ່ຄູອາຈານ.

3. ຕ້ອງປັບປຸງລະບົບການສຶກສາເຕັກນິກ ແລະ ວິຊາຊີບທີ່ມີຢູ່ໃນປະຈຸບັນຄືນໃໝ່ ເພື່ອສ້າງຄວາມສົນໃຈໃຫ້ແກ່ນັກຮຽນ ແລະສ້າງເງື່ອນໄຂໃຫ້ເຂົາເຈົ້າມີໂອກາດເຂົ້າຮຽນ ໂດຍສະເພາະຢ່າງຍິ່ງກໍ່ແມ່ນ ປັບປຸງໃນດ້ານຕ່າງໆດັ່ງຕໍ່ໄປນີ້:
   - ກ. ສະຖາບັນທີ່ກ່ຽວຂ້ອງຄວນສ້າງເງື່ອນໄຂເພື່ອຕອບສະໜອງຕໍ່ຄວາມຕ້ອງການ.
   - ຂ. ຕ້ອງປັບປຸງຫຼັກສູດ, ອຸປະກອນ, ການຝຶກປະຕິບັດຕົວຈິງ, ຄຸນນະພາບຂອງການສິດສອນ ແລະ ອື່ນໆ ພ້ອມກັບປະຕິບັດຫຼັກສູດກ່ຽວກັບ ການພັດທະນາຄວາມເປັນຜູ້ປະກອບການ.
   - ຄ. ການຍົກລະດັບໂຮງຮຽນຊັ້ນສູງ ມາເປັນວິທະຍາໄລທີ່ມີການສອນລະດັບປະຣິນຍາ, ການປະຕິບັດຫຼັກສູດເປັນພາກ (ຫຼື ຫຼັກສູດຍ່ອຍ) ແລະ ການຍົກລະດັບຄຸນນະພາບຂອງຄູອາຈານ ຈະສາມາດຊ່ວຍປັບປຸງຄຸນນະພາບຂອງໂຮງຮຽນໃຫ້ດີຂຶ້ນໄດ້.
   - ງ. ຄວນປັບປຸງແກ້ໄຂເງື່ອນໄຂໃນການສະໝັກເຂົ້າຮຽນ ເພື່ອເພີ່ມຈຳນວນນັກຮຽນ ຜູ້ທີ່ມີຄວາມສາມາດໃຫ້ຫຼາຍຂຶ້ນ. ພ້ອມກັນນັ້ນ ກໍ່ຄວນໃຫ້ການສະໜັບໜູນການຮຽນຂອງເຂົາເຈົ້າ ໂດຍການປະຕິບັດນະໂຍບາຍໃຫ້ທຶນການສຶກສາແບບເປີດກວ້າງ.
   - ຈ. ການຮ່ວມມືກັບພາກເອກະຊົນ ແລະ ຕ່າງປະເທດ ໂດຍສະເພາະກໍ່ແມ່ນ ບັນດາປະເທດໃນຂົງເຂດອາຊຽນ ຈະຊ່ວຍຍົກລະດັບຄຸນນະພາບຂອງໂຮງຮຽນໃຫ້ສູງຂຶ້ນໄດ້ໃນລະດັບຕົ້ນທຶນຕ່ຳ.
   - ສ. ການຈັດສັນງົບປະມານເພີ່ມ ໃຫ້ແກ່ໂຮງຮຽນເຕັກນິກ ແລະ ວິຊາຊີບຖືເປັນປັດໄຈສຳຄັນຕົ້ນຕໍ.
   - ຊ. ເພີ່ມຈຳນວນເຂດຮັບສະໝັກເຂົ້າຮຽນໃນລະບົບການສຶກສາເຕັກນິກ ແລະ ວິຊາຊີບໃຫ້ຫຼາຍຂຶ້ນ, ນັ້ນກໍ່ໝາຍຄວາມວ່າ ເພີ່ມອັດຕາສ່ວນຂອງນັກຮຽນທີ່ຮຽນຈົບຫ້ອງ 8 (ມັດທະຍົມຕອນຕົ້ນ) ທີ່ສາມາດສະໝັກເຂົ້າຮຽນໄດ້ ຫຼື ອາດຈະພິຈາລະນາ ຫຼຸດເກນການຮັບສະໝັກລົງມາຢູ່ໃນລະດັບມັດທະຍົມປີທີ 1 ສຳລັບບາງຫຼັກສູດວິຊາຊີບ ຊຶ່ງວິທີການນີ້ ຈະສາມາດຊ່ວຍເຮັດໃຫ້ຄວາມຕ້ອງການເຂົ້າຮຽນເພີ່ມຂຶ້ນໄດ້.
   - ຍ. ເພີ່ມຄວາມສາມາດ ໃນການດັດປັບໄດ້ໃນການຕອບສະໜອງການຝຶກອົບຮົມ ເຊັ່ນ ການຈັດຕັ້ງປະຕິບັດ ຫຼື ການຂະຫຍາຍຫ້ອງຮຽນພາກຄ່ຳ ແລະ ທ້າຍອາທິດ. ການຈັດຕັ້ງ ຫຼື ຂະຫຍາຍຫ້ອງຮຽນຕາມທີ່ກ່າວມານີ້ ຈະເປີດໂອກາດໃຫ້ນັກຮຽນ ສາມາດເຂົ້າຮຽນຫຼັກສູດການຝຶກອົບຮົມເຫຼົ່ານີ້ໄດ້ຫຼາຍຂຶ້ນ.

4. ໂຄງການການຝຶກອົບຮົມນອກໂຮງຮຽນທີ່ມີໄລຍະເວລາ 2-3 ອາທິດຫາ 2-3 ເດືອນຈະຕ້ອງເນັ້ນໜັກໃສ່ກຸ່ມເປົ້າໝາຍກໍ່ຄືຊາວໜຸ່ມທີ່ມີລາຍຮັບຕ່ຳ ຢູ່ໃນເຂດຕົວເມືອງ ແລະ ຊາວໜຸ່ມຊົນນະບົດຜູ້ ທີ່ບໍ່ໄດ້ຮັບການສຶກສາແບບທົ່ວໄປ ຍ້ອນສາເຫດໃດໜຶ່ງ ໂດຍສະເພາະກໍ່ແມ່ນ ກຸ່ມແມ່ຍິງ. ຫຼັກສູດ ໂຄງການຝຶກອົບຮົມແບບນີ້ຄວນມີລັກສະນະສັ້ນ, ສາມາດເອົາມານຳໃຊ້ຕົວຈິງໄດ້, ບໍ່ມີລາຄາແພງ, ສາມາດເຂົ້າເຖິງໄດ້, ດັດປັບ. ໂຄງການການຝຶກອົບຮົມປະເພດນີ້ ຄວນຈັດຕັ້ງຂຶ້ນໃນທົ່ວທຸກເຂດ (ເຊັ່ນ: ອາດຈະຈັດຕັ້ງຂຶ້ນໃນລະດັບກຸ່ມບ້ານ). ການຝຶກອົບຮົມອາດຈະຈັດຂຶ້ນໃນໂຮງຮຽນໂດຍຄູຝຶກຜູ້ທີ່ມີເງື່ອນໄຂລົງຕິດຕາມຢູ່ເຂດພື້ນທີ່ເປົ້າໝາຍເລື້ອຍໆ ຫຼື ຈັດຕັ້ງການຝຶກອົບຮົມແບບເຄື່ອນທີ່ ໂດຍຈັດອຸປະກອນໄວ້ ໃນລົດບັນທຸກອີງຕາມປະເພດ ແລະ ສະຖານທີ່. ໄລຍະເວລາການຮຽນຫຼັກສູດດັ່ງກ່າວຕ້ອງມີຄວາມຍືດຢຸ່ນສາມາດປັບປ່ຽນໄດ້ (ເຊັ່ນ: ການຈັດຫ້ອງຮຽນພາກຄ່ຳ ແລະ ທ້າຍອາທິດເປັນຕົ້ນ). ການຝຶກອົບຮົມດັ່ງກ່າວ ຈະຊ່ວຍສ້າງຄວາມເຂັ້ມແຂງໃຫ້ແກ່ການດຳເນີນທຸລະກິດໃຫ້ຕົນເອງ ແລະ ການເປັນລູກຈ້າງໃຫ້ຄົນອື່ນ ທີ່ບໍ່ຢູ່ໃນວຽກງານກະສິກຳຂອງຄອບຄົວທັງໃນເຂດຊົນນະບົດ ແລະ ເຂດຕົວເມືອງ. ດັ່ງນັ້ນ, ຄວນຈັດຕັ້ງລະດົມການມີສ່ວນຮ່ວມຂອງພາກເອກະຊົນເຂົ້າໃນແຜນງານ |ການຝຶກອົບຮົມເຫຼົ່ານີ້. ກຸ່ມເປົ້າໝາຍທີ່ຈະເຂົ້າຮັບການຝຶກອົບຮົມໃນແຕ່ລະປີຄວນ ມີຈຳ ນວນ 10,000-12,000 ຄົນ.

5. ຄວນຖ່າຍທອດທັກສະສີມືໃຫ້ແກ່ຫົວໜ່ວຍທຸລະກິດຂະໜາດຈຸລະພາກ ແລະ ຂະໜາດນ້ອຍໂດຍຜ່ານການບໍລິການດ້ານການພັດທະນາທຸລະກິດ. ໜ່ວຍງານສະເພາະກິດ ທີ່ສະໜອງການບໍລິການ ຜະລິດຕະພັນຕາມຄວາມສົນໃຈຂອງບັນດາຫົວໜ່ວຍທຸລະກິດ ອີງຕາມປະເພດສິນຄ້າ, ຂະແໜງການ ແລະ ສະຖານທີ່. ນອກຈາກນີ້, ກໍ່ຄວນດຳເນີນການຄົ້ນຄວ້າຫາແນວທາງ ເພື່ອສົ່ງເສີມການລິເລີ່ມທຸລະກິດ. ໜ່ວຍງານດັ່ງກ່າວຄວນແຈກຢາຍຢູ່ທົ່ວທຸກພາກ.

6. ການຝຶກອົບຮົມ ດ້ານການພັດທະນາຊຸມຊົນໃນລະດັບບ້ານ/ກຸ່ມບ້ານ ຈະສາມາດຊ່ວຍໃຫ້ແຮງງານ ປະກອບອາຊີບອິດສະຫຼະ ແລະ ແຮງງານຮັບຈ້າງສາມາດມີວຽກເຮັດໃໝ່ ຫຼື ເພີ່ມລາຍຮັບຈາກວຽກ ໃນປະຈຸບັນຂອງເຂົາເຈົ້າ.

7. ຄວນດຳເນີນການສຳຫຼວດ ກ່ຽວກັບ ຄວາມຕ້ອງການທັກສະສີມືແຮງງານ ເພື່ອສາມາດວາງແຜນຍຸດທະສາດ ການພັດທະນາສີມືແຮງງານໄດ້ຢ່າງສອດຄ່ອງ.

8. ການມີທັກສະສີມືຄວາມຮູ້ດ້ານບໍ່ແຮ່ ແລະ ທໍລະນີສາດເພີ່ມຂຶ້ນຈະຊ່ວຍຮັກສາສັດສ່ວນຂອງມູນຄ່າ ເພີ່ມຈາກບໍ່ແຮ່ໃຫ້ລາວເຮົາໄດ້ຫຼາຍຂຶ້ນ, ທັງຍັງຊ່ວຍສ້າງທັກສະສີມື ແລະ ເຮັດໃຫ້ການເຈລະຈາລະຫວ່າງ ລັດຖະບານ ແລະ ບໍລິສັດຂຸດຄົ້ນບໍ່ແຮ່ນັ້ນ ໄດ້ຮັບຜົນປະໂຫຍດຫຼາຍຂຶ້ນ. ການເປີດໂຮງຮຽນບໍ່ແຮ່ ແລະ ທໍລະນີສາດ ແມ່ນບາດກ້າວໜຶ່ງທີ່ມີປະໂຫຍດສຳລັບບັນຫາດັ່ງກ່າວ

# ບົດທີ 7:

## ບົດສັງລວມ ແລະ ທິດທາງຕໍ່ໜ້າ



## ບົດທີ 7:

# ບົດສັງລວມ ແລະ ທິດທາງຕໍ່ໜ້າ

ບົດລາຍງານ ການພັດທະນາມະນຸດສະບັບນີ້ ໄດ້ພະຍາຍາມປະເມີນຄືນສະພາບ ການສ້າງວຽກເຮັດງານທຳ ແລະ ຮູບແບບການດຳລົງຊີວິດຂອງປະຊາຊົນລາວ. ຈາກນັ້ນກໍ່ສະເໜີແນະຂໍ້ຄິດເຫັນຕ່າງໆ ເພື່ອສົ່ງເສີມໂອກາດໃນການສ້າງວຽກເຮັດງານທຳ, ການປັບປຸງຄຸນນະພາບຂອງວຽກ ແລະ ລາຍຮັບຂອງສາມັນຊົນ ແລະ ຄອບຄົວຂອງເຂົາເຈົ້າ. ບົດລາຍງານໄດ້ພົບເຫັນວ່າ ໃນໄລຍະຜ່ານມາເຖິງວ່າເສດຖະກິດຈະຂະຫຍາຍໂຕໄປໃນທ່ວງທ່າອັນໄວຍ້ອນມີ ການຂຸດຄົ້ນບໍ່ແຮ່ກໍ່ຕາມ ແຕ່ການຂະຫຍາຍໂຕດັ່ງກ່າວນີ້ຍັງບໍ່ໄດ້ສ້າງວຽກເຮັດງານທຳໄດ້ຫຼາຍເທົ່າທີ່ຄວນ. ປະຊາຊົນລາວສ່ວນຫຼາຍຍັງຢຶດຖືອາຊີບ ກະສິກຳແບບທຳມະຊາດ ຫາລ້ຽງກຸ້ມຕົນເອງຢູ່, ພ້ອມກັນນັ້ນ ກໍ່ຍັງເຫັນວ່າທ້ອງຖິ່ນຕ່າງໆຍັງມີຄວາມແຕກໂຕນກັນຫຼາຍ ຊຶ່ງສະແດງອອກໃຫ້ເຫັນຢູ່ໃນຫຼາຍຕົວຊີ້ບອກກ່ຽວກັບການພັດທະນາມະນຸດ ເຊັ່ນມາດຕະຖານການດຳລົງຊີວິດ, ການສຶກສາ ແລະ ສີມືແຮງງານ, ສຸຂະພາບ ຫຼື ພື້ນຖານໂຄງລ່າງຕ່າງໆ.

## ຜົນຂອງການສຶກສາໂດຍສັງເຂບ

### ການພັດທະນາມະນຸດ – ການຕີລາຄາສະພາບ

ໃນ ປີ 2007-08 ພົນລະເມືອງລາວ ປະມານ 27% ຍັງດຳລົງຊີວິດຢູ່ໃນລະດັບຕໍ່າກວ່າເສັ້ນຄວາມທຸກຍາກໃນ ປີ 2007-08. ອັດຕາການເຂົ້າຮຽນຕໍ່າປະກອບກັບອັດຕາການປະລະການຮຽນສູງເປັນການຈຳກັດຄວາມສາມາດໃນການສ້າງວຽກເຮັດງານທຳໃນຂະແໜງການອື່ນທີ່ບໍ່ແມ່ນຂະແໜງກະສິກຳ. ອັດຕາການຕາຍຂອງເດັກແດງທີ່ເພີ່ມຂຶ້ນໃນບາງແຂວງກໍ່ແມ່ນບັນຫາທີ່ໜ້າເປັນຫ່ວງ, ຈະເຫັນໄດ້ວ່າການປ່ຽນແປງຂອງບັນດາຕົວຊີ້ບອກທາງດ້ານການພັດທະນາມະນຸດ ກໍ່ມີຄວາມແຕກຕ່າງກັນລະຫວ່າງບັນດາແຂວງໃນແຕ່ລະໄລຍະເວລາທີ່ແຕກຕ່າງກັນ, ບາງແຂວງທີ່ເຄີຍມີລະດັບຄວາມທຸກຍາກຕໍ່າແຕ່ກໍ່ເພີ່ມສູງຂຶ້ນ. ເວົ້າລວມແລ້ວ, ແຂວງອັດຕະປື, ເຊກອງ, ສາລະວັນ, ຜົ້ງສາລີ ແລະ ອຸດົມໄຊ ແມ່ນແຂວງທີ່ມີລະດັບການພັດທະນາມະນຸດຕໍ່າກວ່າໝູ່. ສ່ວນ ນະຄອນຫຼວງວຽງຈັນ ແລະ ແຂວງ ວຽງຈັນ ມີລະດັບການພັດທະນາມະນຸດສູງກວ່າໝູ່.

### ໂຄງສ້າງຂອງວຽກເຮັດງານທຳ

ກຳລັງແຮງງານຂອງປະເທດລາວປະມານ 79% ເຮັດວຽກຢູ່ໃນຂະແໜງການກະສິກຳ ທີ່ມີລະດັບຜະລິດຕະພາບຕໍ່າ ແລະ ໃນກິດຈະກຳອື່ນທີ່ກ່ຽວຂ້ອງ. ໃນໄລຍະປີ 1995-2005 ຜ່ານມາມີຈຳນວນແຮງງານ 6.9% ປ່ຽນວຽກໄປສູ່ຂະແໜງການທີ່ມີລະດັບຜະລິດຕະພາບສູງກວ່າ ເຊັ່ນ ຂະແໜງທີ່ບໍ່ແມ່ນກະສິກຳ ຊຶ່ງຖ້າຫາກພິຈາລະນາຕາມທັດສະນະຂອງການເຕີບໂຕທາງດ້ານເສດຖະກິດແບບຍືນຍົງ ແລ້ວຖືວ່າ ການປ່ຽນແປງນີ້ຍັງ ຢູ່ໃນລະດັບຕໍ່າ. ກຸ່ມຊົນເຜົ່າຕ່າງໆ ໃນແຂວງຫ່າງໄກໃຈກາງຂອງປະເທດ ຍັງມີອັດຕາສ່ວນປະຊາກອນເຮັດວຽກໃນຂະແໜງກະສິກຳຫຼາຍກວ່າກຸ່ມອື່ນ. ໃນໄລຍະປີ 1995-2005 ເຫັນວ່າ ໜ້ອຍກວ່າເຄິ່ງໜຶ່ງຂອງແຮງງານໃໝ່ໄດ້ເຮັດວຽກໃນຂະແໜງນອກກະສິກຳ. ດັດຊະນີການພັດທະນາມະນຸດຈະສູງ ໃນແຂວງທີ່ມີການຈ້າງງານ ໃນຂະແໜງບໍ່ແມ່ນກະສິກຳ ແລະ ມີຂະແໜງກະສິກຳທີ່ມີຜະລິດຕະພາບສູງ.

ຂະແໜງອຸດສາຫະກຳ ແລະ ບໍລິການໄດ້ຂະຫຍາຍໂຕໄວ ແຕ່ວ່າຂະແໜງການທີ່ເຂັ້ມແຮງງານຂອງພາກອຸດສາຫະກຳມີການຂະຫຍາຍໂຕຊ້າກວ່າຂະແໜງການທີ່ນຳໃຊ້ຊັບພະຍາກອນທຳມະຊາດ(ແຕ່ກໍ່ມີການສ້າງວຽກເຮັດງານທຳບໍ່ຫຼາຍ). ເຖິງແມ່ນວ່າ ຂະແໜງອຸດສາຫະກຳຈະປະກອບສ່ວນເຂົ້າໃນການຂະຫຍາຍໂຕເສດຖະກິດສູງກວ່າໝູ່ກໍ່ຕາມແຕ່ກໍ່ຍັງມີການຈ້າງງານພຽງ 4.8% ຂອງກຳລັງແຮງງານ. ກົງກັນຂ້າມ, ເຖິງວ່າຂະ ແໜງບໍລິການຈະມີການຂະຫຍາຍໂຕໃນລະດັບພຽງແຕ່ເຄິ່ງໜຶ່ງຂອງຂະແໜງອຸດສາຫະກຳກໍ່ຕາມແຕ່ກໍ່ມີການຈ້າງງານໄດ້ເຖິງ 16% ຂອງກຳລັງແຮງງານທັງໝົດ. ຂະແໜງການທີ່ສ້າງວຽກເຮັດງານທຳໄດ້ຫຼາຍກວ່າໝູ່ແມ່ນຂະແໜງການຄ້າ, ການຂົນສົ່ງ, ໂຮງແຮມ ແລະ ການທ່ອງທ່ຽວ, ການສຶກສາ ແລະ ສາທາລະນະສຸກ ຊຶ່ງມີທ່າແຮງຂະຫຍາຍວຽກເຮັດງານທຳໄດ້ຫຼາຍ. ແຕ່ເຖິງຢ່າງໃດກໍ່ຕາມ, ຂະແໜງການເຫຼົ່ານີ້ກຳລັງປະເຊີນກັບບັນຫາຫຼາຍຢ່າງທີ່ເປັນການຖ່ວງດຶງການຂະຫຍາຍໂຕ ເປັນຕົ້ນແມ່ນພື້ນຖານໂຄງລ່າງອັນຈຳເປັນ, ການສະໜັບສະໜູນຈາກທະນາຄານ, ມາດຕະການສະໜັບສະໜູນທາງງົບປະມານ, ກົດລະບຽບ ແລະ ການຂາດແຄນບຸກຄະລາກອນທີ່ມີຄຸນນະພາບ.

ພາກເອກະຊົນຍັງອ່ອນນ້ອຍ; ອັດຕາການຂະຫຍາຍໂຕ ຍັງຖືກຖ່ວງດຶງຈາກບັນຫາຕ່າງໆທີ່ກ່າວມາຂ້າງເທິງນັ້ນ. ແຕ່ຖ້າມີການຊຸກຍູ້ຢ່າງເຂັ້ມແຂງຂອງການຂະຫຍາຍໂຕຂອງພາກເອກະຊົນ ຈະສາມາດຊ່ວຍຮັກສາຜົນປະໂຫຍດທາງການເງິນໄວ້ໃນປະເທດໃຫ້ຫຼາຍຂຶ້ນພ້ອມທັງສາມາດສ້າງວຽກເຮັດງານທຳໄດ້ຫຼາຍຂຶ້ນໂດຍທາງກົງ ແລະ ທາງອ້ອມ. ພ້ອມກັນນັ້ນ ກໍ່ຍັງຈະເປັນການກະຕຸ້ນໃຫ້ມີຫຼາຍພາກສ່ວນເຂົ້າມາມີສ່ວນຮ່ວມໃນການພັດທະນາປະເທດຊາດຫຼາຍຂຶ້ນ.

### ການດຳລົງຊີວິດໃນເຂດຊົນນະບົດ

ຖ້າພິຈາລະນາໃນທາງເສດຖະກິດແລ້ວຈະເຫັນວ່າ ‘ແຮງງານຮັບຈ້າງທົ່ວໄປທີ່ເຮັດວຽກເຕັມມາດຕະຖານເວລາ’ ແມ່ນກຸ່ມແຮງງານທີ່ມີຄວາມສ່ຽງທີ່ສຸດ ແລະ ຖືວ່າເປັນກຳລັງແຮງງານມີທ່າແຮງທີ່ຈະ

ຫັນສູ່ອາຊີບໃໝ່. ແຮງງານປະເພນີ້ປະກົດຂຶ້ນຫຼາຍທີ່ສຸດຢູ່ໃນບ້ານທີ່ມີການຍົກຍ້າຍຖິ່ນຖານ ແລະ ກຸ່ມຊົນເຜົ່າທີ່ເວົ້າພາສາຈີນ-ຕິເບດ ແລະ ມອນ-ຂະແມ, ແຮງງານເຫຼົ່ານີ້ ໃນເຂດຊົນນະບົດໃນຮອບໜຶ່ງປີເຂົາເຈົ້າຈະເຮັດຫຼາຍກິດຈະກຳ. ໃນລະດູແລ້ງ, ແຮງງານດັ່ງກ່າວສ່ວນໃຫຍ່ຈະຢຸດເຊົາວຽກປະຈຳຂອງຕົນໄປປະກອບກິດຈະກຳອື່ນຊຶ່ງສະພາບການໃນໄລຍະນີ້ ປຽບເໝືອນການເຮັດວຽກບໍ່ເຕັມເວລາມາດຕະຖານທີ່ບໍ່ປະກົດໃຫ້ເຫັນປະຈັກຕາ ຫຼື ຕົກຢູ່ໃນສະພາບການເຮັດວຽກບໍ່ເຕັມມາດຕະຖານເວລາ. ສະແດງໃຫ້ເຫັນວ່າອັດຕາການຫວ່າງງານຢູ່ໃນລະດັບ 12-15% ຂອງຈຳນວນມື້ເຮັດວຽກທັງໝົດຊຶ່ງຖືວ່າເປັນອັດຕາທີ່ສູງສົມຄວນ. ແຮງງານຈາກຄອບຄົວທີ່ທຸກຍາກ, ຊາວໜຸ່ມ, ຊາວນາທຳການຜະລິດຂະໜາດນ້ອຍ, ແຮງງານຊົນເຜົ່າ ແລະ ປະຊາຊົນທີ່ອາໄສຢູ່ໃນບ້ານທີ່ມີການຍົກຍ້າຍຖິ່ນຖານ ແມ່ນກຸ່ມແຮງງານທີ່ປະສົບກັບບັນຫາການຫວ່າງງານສູງກວ່າກຸ່ມອື່ນໆ. ການເພີ່ມຂຶ້ນຂອງຈຳນວນປະຊາກອນ ເປັນສາຍເຫດໃຫ້ເກີດການຂາດແຄນທີ່ດິນ ແລະ ຊັບພະຍາກອນທຳມະຊາດ. ນອກຈາກນັ້ນ, ບັນຫາການຍົກຍ້າຍຖິ່ນຖານ ຊຶ່ງລວມເຖິງການໂຮມບ້ານໃໝ່ ທີ່ຄົ້ນຄວ້າບໍ່ລະອຽດໃນບາງກໍລະນີກໍ່ກາຍເປັນສ່ວນໜຶ່ງຂອງຕົ້ນເຫດບັນຫາດັ່ງກ່າວ.

## ແຮງງານທີ່ເຮັດວຽກຢ່າງບໍ່ເປັນທາງການໃນເຂດຕົວເມືອງ

ໃນເຂດຕົວເມືອງ, ແຮງງານໃນຕະຫຼາດແຮງງານທີ່ບໍ່ເປັນທາງການແມ່ນກຳລັງແຮງງານສ່ວນໃຫຍ່. ແຮງງານເຫຼົ່ານີ້ບໍ່ໄດ້ຮັບການປົກປ້ອງຈາກກົດໝາຍໃນລະດັບອັນຄວນ ເປັນຕົ້ນແມ່ນ ທາງດ້ານສະພາບແວດລ້ອມໃນການເຮັດວຽກ, ມາດຕະຖານການເຮັດວຽກ ຫຼື ຜົນຕອບແທນ. ຕາມປົກກະຕິແລ້ວແຮງງານເຫຼົ່ານີ້ຈະເຮັດວຽກ 55-70 ຊົ່ວໂມງຕໍ່ອາທິດໂດຍບໍ່ມີວັນພັກ ແລະ ໄດ້ຄ່າຈ້າງໃນລະດັບພໍປານກາງເທົ່ານັ້ນ (ປະມານ 20,000 ກີບຕໍ່ມື້ ແລະ ບໍ່ໄດ້ຮັບເງິນໃນວັນພັກທາງການ). ແຮງງານທັງໝົດລວມທັງຜູ້ທີ່ປະກອບອາຊີບອິດສະຫຼະປະສົບກັບບັນຫາການຫວ່າງງານ. ເມື່ອປະສົບກັບບັນຫາການຫວ່າງງານ ແຮງງານເຫຼົ່ານີ້ ຈະມີລາຍຮັບຕົກຕໍ່າທີ່ສຸດ ແລະ ຫຼາຍຄົນຕ້ອງປະສົບກັບບັນຫາການເປັນໜີ້ສິນ. ເຄືອຂ່າຍນອກລະບົບ ກ່ຽວກັບການຈັດຫາວຽກເຮັດງານທຳ ແລະ ການທຳມາຫາກິນກໍ່ມີຢູ່ແບບກະແຈກກະຈາຍທົ່ວໄປ. ສ່ວນການຕັດສິນໃຈຈະຈ້າງງານ ຫຼື ບໍ່ນັ້ນແມ່ນຂຶ້ນກັບການພິຈາລະນາໂດຍພາລະການທີ່ບໍ່ສົມເຫດສົມຜົນຂອງນາຍຈ້າງ.

## ແຮງງານເຄື່ອນຍ້າຍໄປເຮັດວຽກຕ່າງປະເທດ

ແຮງງານລາວທີ່ໄປເຮັດວຽກຢູ່ປະເທດໄທຄາດວ່າຈະມີປະມານ 8% ຂອງກຳລັງແຮງງານທັງໝົດ. ແຮງງານສ່ວນໃຫຍ່ແມ່ນເຮັດວຽກໃນຂະແໜງການທີ່ມີລາຍຮັບຕ່ຳໃນຕະຫຼາດແຮງງານຂອງປະເທດໄທ. ການເຂົ້າໄປເຮັດວຽກ, ການຍ້າຍວຽກ ແລະ ການໂອນເງິນກັບບ້ານ ແມ່ນປະຕິບັດກັນຕາມຊ່ອງທາງທີ່ບໍ່ເປັນທາງການເຖິງແມ່ນວ່າຊ່ອງທາງເຫຼົ່ານັ້ນ ຈະມີຄວາມສ່ຽງ ແລະ ອັນຕະລາຍກໍ່ຕາມ. ຕາມປົກກະຕິແຮງງານເຫຼົ່ານີ້ຕ້ອງເຮັດວຽກແບບບໍ່ມີກຳນົດ ແລະ ຫຼາຍຊົ່ວໂມງຕິດຕໍ່ກັນໂດຍບໍ່ໄດ້ພັກຜ່ອນ ແລະ ສ່ວນຫຼາຍແມ່ນເຮັດວຽກປະເພດເປື້ອນເປິ, ອັນຕະລາຍ ແລະ ຫຍຸ້ງຍາກ. ໃນບາງກໍລະນີແຮງງານດັ່ງກ່າວກໍ່ຖືກຕົວະຍົວະຫຼອກລວງ. ຍິ່ງໄປກວ່ານັ້ນ, ແຮງງານແມ່ຍິງ ແມ່ນມີຄວາມສ່ຽງຕໍ່ອັນຕະລາຍທີ່ຈະຕົກເປັນເຫຍື່ອຂອງການຄ້າມະນຸດ. ແຮງງານເຫຼົ່ານີ້ໄດ້ປະເຊີນກັບສະພາບການຕົກງານຢູ່ເລື້ອຍໆ.

ແຮງງານລາວທີ່ເຮັດວຽກຢູ່ປະເທດໄທ ຫຼາຍກວ່າເຄິ່ງໜຶ່ງ ໄດ້ຈົດທະບຽນກັບອຳນາດການປົກຄອງຂອງໄທ. ສ່ວນແຮງງານທີ່ໄດ້ຈົດທະບຽນກັບທາງການລາວນັ້ນມີພຽງແຕ່ຈຳນວນໜ້ອຍ.

## ລະດັບຄວາມສາມາດຂອງມະນຸດ

ຈຳນວນປີການສຶກສາສະເລ່ຍຂອງແຮງງານລາວມີພຽງແຕ່ປະມານ 4 ປີເທົ່ານັ້ນ ແລະ ຄຸນນະພາບການສຶກສາກໍ່ບໍ່ມີຄວາມແຕກຕ່າງກັນ. ເດັກນ້ອຍໃນເກນອາຍຸເຂົ້າຮຽນໜ້ອຍກວ່າ 70% ໄດ້ຮຽນໜັງສືຊຶ່ງໃນນັ້ນ ອັດຕາເຂົ້າຮຽນຂອງເດັກນ້ອຍຍິງ ແລະ ເດັກນ້ອຍທີ່ອາໄສຢູ່ໃນເຂດຊົນນະບົດຫ່າງໄກສອກຫຼີກ ກໍ່ຍິ່ງມີຕ່ຳຫຼາຍ. ໂຮງຮຽນປະຖົມໃນທົ່ວປະເທດປະມານເຄິ່ງໜຶ່ງຍັງເປັນໂຮງຮຽນມູນທີ່ມີຂັ້ນຮຽນຮອດແຕ່ຫ້ອງ ປໍ 3 ຫຼື ປໍ 4 ຊຶ່ງສະພາບດັ່ງກ່າວຍິ່ງຮ້າຍແຮງກວ່າໃນເຂດຫ່າງໄກສອກຫຼີກ ທີ່ເປັນເຂດຊົນເຜົ່າອາໄສຢູ່ ຢູ່ໃນລາວເຮົາຍັງຂາດແຄນບຸກຄະລາກອນທີ່ມີຄວາມຊຳນານທາງດ້ານເຕັກນິກ. ການສິດສອນຍັງມີຄຸນນະພາບຕ່ຳຢູ່, ຫຼັກສູດການສອນໂດຍທົ່ວໄປບໍ່ສອດຄ່ອງກັບສະພາບຄວາມຕ້ອງການຕົວຈິງຂອງທ້ອງຖິ່ນ, ສະພາບຂາດແຄນໂຮງຮຽນໃນເຂດທີ່ມີຄວາມຕ້ອງການ ແລະ ສະພາບທີ່ຈະຕ້ອງໄດ້ແບກຫາບຄ່າໃຊ້ຈ່າຍໃນການສຶກສາທີ່ແພງເປັນສາເຫດໜຶ່ງທີ່ສຳຄັນຂອງບັນຫາຕ່າງໆທີ່ກ່າວມາຂ້າງເທິງນັ້ນ.

# ຂໍ້ສະເໜີແນະເພື່ອປັບປຸງການພັດທະນາມະນຸດໂດຍການສ້າງວຽກເຮັດງານທຳ

## ບັນຫາກ່ຽວພັນກັບຫຼາຍພາກສ່ວນທີ່ຄວນພິຈາລະນາ

1. ການວາງນະໂຍບາຍທີ່ກຳນົດເປົ້າໝາຍເພື່ອສົ່ງເສີມລະດັບຄົວເຮືອນ ແລະ ບຸກຄົນເປັນ ສິ່ງຈຳເປັນ ແລະ ສຳຄັນຢ່າງຍິ່ງເພື່ອເຮັດໃຫ້ເປົ້າໝາຍເຫຼົ່ານີ້ໄດ້ຮັບຜົນປະໂຫຍດຢ່າງທົ່ວເຖິງເນື່ອງຈາກວ່າບໍ່ແມ່ນໝົດທຸກຄົນ ຫຼື ໝົດທຸກຄອບຄົວຈະສາມາດໄດ້ຮັບຜົນປະໂຫຍດຈາກມາດຕະການຕ່າງໆຂອງກົນໄກຕະຫຼາດ ແລະ ນະໂຍບາຍຈາກພາກລັດເນື່ອງຈາກວ່າເຂົາເຈົ້າຍັງຂາດຄວາມເຂັ້ມແຂງ ແລະ ຂາດຂໍ້ມູນຂ່າວສານ.

2. ໂຄງການພັດທະນາທຸກໆໂຄງການ ຕ້ອງເອົາໃຈໃສ່ເນັ້ນໜັກເຖິງຄວາມສຳຄັນ ຂອງບົດບາດຍິງຊາຍ ແລະ ຊົນເຜົ່າ.

3. ຕ້ອງສ້າງໃຫ້ມີມາດຕະການສະເພາະ ແລະ ພຽງພໍເພື່ອຮອງຮັບຜົນເສຍຫາຍທີ່ອາດຈະເກີດຂຶ້ນໃນການສ້າງໂຄງການອຸດສາຫະກຳທີ່ອາດຈະສົ່ງຜົນໃຫ້ເກີດບັນຫານ້ຳເສຍຫຼືໂຄງການທີ່ມີການຄອບຄອງທີ່ດິນທີ່ຕ້ອງມີການຍົກຍ້າຍຖິ່ນຖານຂອງຊຸມຊົນ.

4. ຄວນຈັດຕັ້ງປະຕິບັດການຕິດຕາມກວດກາການພັດທະນາມະນຸດໃນລະດັບທ້ອງຖິ່ນ ແລະ ຄວນສະໜອງການຝຶກອົບຮົມໃຫ້ແກ່ພະນັກງານ ທີ່ປະຕິບັດໜ້າທີ່ດັ່ງກ່າວນີ້ເພື່ອໃຫ້ເຂົາເຈົ້າສາມາດຕິດຕາມປະເມີນຜົນໄດ້ຢ່າງຊັດເຈນ.

5. ຄວນຈັດຕັ້ງດຳເນີນການຄົ້ນຄວ້າເພີ່ມເຕີມໃນບາງບັນຫາຕົ້ນຕໍດັ່ງຕໍ່ໄປນີ້: ດ້ານສາທາລະນະສຸກ, ການເຄື່ອນຍ້າຍແຮງງານພາຍໃນ, ການສຶກສາຂອງເດັກຍິງ, ອາຊີບນອກຂະແໜງ

ກະສິກຳ ແລະ ອາຊີບຫຼັງລະດູເກັບກ່ຽວ ແລະ ກຸ່ມຊົນເຜົ່າຕ່າງໆ.

6. ການລົງທຶນໃນແຕ່ລະພູມີພາກຂອງປະເທດຄວນມີຄວາມສົມສ່ວນ ແລະ ແທດເໝາະ.

### ເຮັດໃຫ້ຂະແໜງອຸດສາຫະກຳສ້າງຄວາມເຂັ້ມແຂງ ໃຫ້ແກ່ປະຊາຊົນ ແລະ ໃຫ້ບໍລິການປະຊາຊົນ

ຄວນຂະຫຍາຍຖານຂອງຂະແໜງອຸດສາຫະກຳໃຫ້ກວ້າງຂວາງຂຶ້ນ ເຊັ່ນ ນອກຈາກການລົງທຶນຂອງຕ່າງປະເທດເຂົ້າໃນຂະແໜງບໍ່ແຮ່, ໄຟຟ້າແລະຕັດຫຍິບແລ້ວກໍ່ຄວນຂະຫຍາຍການລົງທຶນເຂົ້າໃນຂະແໜງການອື່ນໆອີກ:

1. ເພື່ອສົ່ງເສີມໃຫ້ຂະແໜງການເຂັ້ມງານດັ່ງກ່າວໃຫ້ມີການຂະຫຍາຍໂຕໄວຄວນປະຕິບັດນະໂຍບາຍສະເພາະຕໍ່ອຸດສາຫະກຳທີ່ເຂັ້ມງານທີ່ມີຢູ່;

2. ຄວນປັບປຸງຂະແໜງການຂຸດຄົ້ນ ແລະ ຂະແໜງການທີ່ມີການຈ້າງງານໜ້ອຍໃຫ້ມີການເພີ່ມການສ້າງວຽກເຮັດງານທຳ, ມີການຖ່າຍໂອນເຕັກໂນໂລຊີ ແລະ ມູນຄ່າເພີ່ມໃຫ້ຫຼາຍຂຶ້ນພາຍໃນປະເທດ. ການທີ່ຈະເຮັດແນວນັ້ນໄດ້ ກໍ່ຕໍ່ເມື່ອວ່າເຮົາສ້າງຂະແໜງການອຸດສາຫະກຳປາຍນ້ຳ ໃນຂະແໜງປຸງແຕ່ງແຮ່ທາດ ແລະ ຂະແໜງອຸດສາຫະກຳທີ່ໃຊ້ແຮ່ທາດ ທີ່ອາດສາມາດຊ່ວຍເພີ່ມລາຍຮັບແຫ່ງຊາດ. ໃນໄລຍະເບື້ອງຕົ້ນ, ອາດຈະເລີ່ມດ້ວຍກິດຈະກຳຈຳນວນໜຶ່ງໂດຍມອບໝາຍໃຫ້ໜ່ວຍງານໃນທ້ອງຖິ່ນເຂົ້າມາມີສ່ວນຮ່ວມ ເຊັ່ນວຽກງານຂົນສົ່ງ, ການສ້ອມແປງ, ການສະໜອງອາຫານໃນສະຖານທີ່ເຮັດວຽກເຫຼົ່ານີ້ ເປັນຕົ້ນ.

3. ບົດບາດຂອງພາກເອກະຊົນ ແລະ ວິສາຫະກິດຂະໜາດນ້ອຍ ແລະ ກາງເປັນສິ່ງທີ່ສຳຄັນຫຼາຍ. ສະນັ້ນ, ບົດລາຍງານສະບັບນີ້ ຈຶ່ງໄດ້ເນັ້ນໜັກເຖິງຄວາມຈຳເປັນໃນການຈັດຕັ້ງປະຕິບັດກົດໝາຍວິສາຫະກິດ ຂອງປີ 2005 ແລະ ການຂະຫຍາຍກິດຈະການຕ່າງໆຂອງພາກເອກະຊົນ. ຄວນມີມາດຕະການສົ່ງເສີມ ອຸດສາຫະກຳທີ່ຍັງອ່ອນນ້ອຍຕ່າງໆ ເຊັ່ນ ໃຫ້ການສະໜັບສະໜູນທາງການເງິນໃນບາງວຽກງານບູລິມະສິດ, ໃຫ້ຄວາມສະດວກໃນຂັ້ນຕອນການປະກອບເອກະສານ, ການອອກໃບອະນຸຍາດໄວຂຶ້ນ ແລະ ອື່ນໆ.

### ເພີ່ມລາຍຮັບ ແລະ ປັບປຸງການດຳລົງ ຊີວິດຂອງປະຊາຊົນໃນເຂດຊົນນະບົດ

#### ໃນຂົງເຂດກະສິກຳ

1. ຄວນຈັດຕັ້ງປະຕິບັດການຂຶ້ນທະບຽນທີ່ດິນກະສິກຳໃຫ້ໄວຂຶ້ນ ເພື່ອພັດທະນາຕະຫຼາດທີ່ດິນ ທີ່ມີຄວາມຈຳເປັນໃນການຫັນເປັນທັນສະໄໝໃຫ້ແກ່ພາກກະສິກຳ.

2. ຄວນຈັດສັນທີ່ດິນຢ່າງສົມເຫດສົມຜົນ, ບໍ່ໃຫ້ຈັດແບ່ງດິນເປັນຕອນດິນນ້ອຍເກີນໄປ ເພາະຈະເຮັດໃຫ້ເສຍຜົນປະໂຫຍດ ແລະ ບໍ່ຄຸ້ມຄ່າທາງດ້ານເສດຖະກິດ.

3. ນະໂຍບາຍທີ່ດິນຄວນມີຄວາມລະອຽດອ່ອນ ແລະ ຄຳນຶງເຖິງບັນຫາຜົນກະທົບທີ່ອາດຈະເຮັດໃຫ້ຊາວກະສິກອນສູນເສຍທີ່ດິນຂອງຕົນໄປໂດຍບໍ່ສະໝັກໃຈ.

4. ການເພີ່ມຜະລິດຕະພາບທາງດ້ານກະສິກຳຂອງຄອບຄົວຈະຊ່ວຍໃຫ້ ລາຍຮັບ ຂອງຊາວຊົນນະບົດເພີ່ມຂຶ້ນຢ່າງມີປະສິດທິພາບຫຼາຍກວ່າການດຳເນີນການປູກຝັງຂະໜາດໃຫຍ່.

5. ການນຳໃຊ້ເຕັກໂນໂລຊີທີ່ບໍ່ສົ່ງຜົນກະທົບຕໍ່ທຳມະຊາດ, ແນວພັນທີ່ມີຄຸນນະພາບ, ສິນເຊື່ອ, ການປູກພືດປະສົມປະສານ, ການຜະລິດກະສິກຳເປັນລະບົບ ແລະ ລະບົບຊົນລະປະທານ ທັງໝົດເຫຼົ່ານີ້ ລ້ວນແຕ່ເປັນປະໂຫຍດຕໍ່ການຫັນເອົາພາກກະສິກຳໄປສູ່ຄວາມທັນສະໄໝ. ພ້ອມກັນນັ້ນ, ກໍ່ຄວນຖືເປັນບູລິມະສິດເຈົ້າຂອງທີ່ດິນລາຍນ້ອຍ, ຊາວນາແມ່ຍິງ ໂດຍສະເພາະຜູ້ທີ່ຢູ່ເຂດຫ່າງໄກສອກຫຼີກ.

6. ການເຮັດສັນຍາການຜະລິດກະສິກຳ, ການສ້າງຕັ້ງສະມາຄົມຊາວນາ, ການເກັບຂໍ້ມູນທາງສື່ເອເລັກໂຕຼນິກ ແລະ ອື່ນໆ ຈະຊ່ວຍເສີມສ້າງອຳນາດການຕໍ່ລອງຂອງຊາວນາ ໃນວຽກງານການຕະຫຼາດຂອງເຂົາເຈົ້າໃຫ້ເຂັ້ມແຂງ.

#### ໂຄງການຄ້ຳປະກັນດ້ານວຽກເຮັດງານທຳ

ແຮງງານໃນຊົນນະບົດຈຳນວນຫຼວງຫຼາຍ ປະສົບກັບບັນຫາການຫວ່າງງານຕາມລະດູການ ໂດຍສະເພາະຢ່າງຍິ່ງກໍ່ແມ່ນໃນລະດູບໍ່ມີການເກັບກ່ຽວ. ການສ້າງໂຄງການທີ່ມີການຈ້າງງານຕາມຄວາມຕ້ອງການເຊັ່ນ ການຈ້າງແຮງງານບໍ່ມີທັກສະສີມືໃນຄ່າຈ້າງຕ່ຳສຸດ ເພື່ອເຮັດວຽກງານກໍ່ສ້າງໂຄງລ່າງພື້ນຖານ ໃນໄລຍະທີ່ມີອັດຕາການຫວ່າງງານສູງ ຈະຊ່ວຍເຫຼືອທາງສັງຄົມຢ່າງສົມກຽດ ແລະ ທັງເປັນການປັບປຸງພື້ນຖານໂຄງລ່າງໃນເຂດຊົນນະບົດ.

#### ຂົງເຂດວຽກງານນອກຂະແໜງກະສິກຳ ແລະ ນອກລະດູເກັບກ່ຽວ

ການຂະຫຍາຍຫົວໜ່ວຍທຸລະກິດໃນຂະແໜງການທີ່ບໍ່ແມ່ນກະສິກຳ ແລະ ວຽກງານນອກລະດູເກັບກ່ຽວໃນພາກເອກະຊົນຈະສາມາດສ້າງວຽກເຮັດງານທຳໄດ້ຫຼາຍຂຶ້ນ ແຕ່ກໍ່ຕ້ອງອາໄສການສະໜັບສະໜູນຈາກການ ໃຫ້ສິນເຊື່ອ, ການຊ່ວຍເຫຼືອທາງວິຊາການ ແລະ ການເຂົ້າເຖິງຕະຫຼາດ. ທຸລະກິດຈຸລະພາກທີ່ມີຄວາມເຂັ້ມແຂງ ແລະ ຂະແໜງການທີ່ເຮັດວຽກໃຫ້ແກ່ຕົນເອງ ອາດເປັນຈຸດເລີ່ມຕົ້ນຂອງການສ້າງຄວາມຫຼາກຫຼາຍໃນ ດ້ານວຽກເຮັດງານທຳ. ການຊອກຫາກິດຈະກຳທີ່ມີທັງໃນຂະແໜງການທີ່ມີການຈ້າງງານແຮງງານຮັບຈ້າງທົ່ວໄປ ແລະ ແຮງງານທີ່ປະກອບອາຊີບອິດສະຫຼະທີ່ມີຄວາມຍືນຍົງ ແລະ ສ້າງສະພາບແວດລ້ອມທີ່ເອື້ອອຳນວຍໃຫ້ແກ່ການຂະຫຍາຍຕົວຂອງກິດຈະກຳເຫຼົ່ານີ້ຈະເປັນສິ່ງທີ່ມີປະໂຫຍດສູງສຸດ.

### ການເພີ່ມລາຍຮັບຂອງແຮງງານ ທີ່ມີລາຍຮັບຕ່ຳໃນເຂດຕົວເມືອງ

#### ສ້າງລະບົບຂໍ້ມູນຂ່າວສານຕະຫຼາດແຮງງານ

ເພື່ອເປັນການສະໜອງການບໍລິການໃຫ້ແກ່ແຮງງານຮັບຈ້າງທົ່ວໄປແລະແຮງງານທີ່ປະກອບອາຊີບອິດສະຫຼະມັນມີຄວາມຈຳເປັນທີ່ຈະຕ້ອງສ້າງຕັ້ງລະບົບຂໍ້ມູນຂ່າວສານຕະຫຼາດແຮງງານ ປະຈຳເມືອງຂຶ້ນ. ລະບົບດັ່ງກ່າວ ຄວນມີຂໍ້ມູນກ່ຽວກັບອາຊີບທີ່ຕ້ອງການໃນປະຈຸບັນ, ທາງເລືອກໃນການຈ້າງງານ, ໂອກາດການຝຶກອົບຮົມສຳລັບຄົນທີ່ມີພື້ນຖານໃນສາຂາຕ່າງໆ, ຂໍ້ມູນຂອງແຮງງານ ແລະ ຂໍ້ມູນອື່ນໆ ທີ່ສາມາດຊ່ວຍເຫຼືອການຊອກວຽກເຮັດງານທຳ ແລະ ເປັນການເຊື່ອມຕໍ່ລະຫວ່າງພາກສ່ວນສະໜອງແຮງງານແລະພາກສ່ວນ

ຕ້ອງ ການແຮງງານ. ກະຊວງ ແຮງງານ ແລະ ສະຫວັດດີການສັງຄົມ ແລະ ໜ່ວຍງານອື່ນທີ່ກ່ຽວຂ້ອງ ຕ້ອງເປັນຜູ້ຄຸ້ມຄອງລະບົບຂໍ້ມູນຂ່າວສານຕະຫຼາດແຮງງານດັ່ງກ່າວ.

## ເພີ່ມລາຍຮັບຂອງແຮງງານທີ່ປະກອບອາຊີບອິດສະຫຼະທີ່ມີລາຍຮັບຕໍ່າໃນຕົວເມືອງ

ບັນດາມາດຕະການທີ່ສະເໜີຢູ່ຂ້າງເທິງ ກ່ຽວກັບ ການຂະຫຍາຍ ແລະ ສ້າງລາຍຮັບນອກລະດູເກັບກ່ຽວ ແລະ ຂະແໜງການບໍ່ແມ່ນກະສິກຳ ສາມາດນຳໃຊ້ກັບແຮງງານທີ່ມີລາຍຮັບຕໍ່າໃນຕົວເມືອງໄດ້. ພ້ອມກັນນັ້ນ, ເຖິງແມ່ນວ່າ ບັນດາວິສາຫະກິດຈຸລະພາກໃນເຂດຕົວເມືອງບໍ່ມີທີ່ຕັ້ງອັນແນ່ນອນກໍ່ຕາມແຕ່ກໍ່ສາມາດຂະຫຍາຍໂຕໄດ້ຖ້າວ່າເຂົາເຈົ້າຖືກຮັບຮອງທາງກົດໝາຍ.

### ປົກປ້ອງຜົນປະໂຫຍດຂອງແຮງງານຮັບຈ້າງທົ່ວໄປ

ກະຊວງແຮງງານ ແລະ ສະຫວັດດີການສັງຄົມ (ແລະ ໜ່ວຍງານເຮັດວຽກການພັດທະນາທັກສະສີມືຕ່າງໆ) ຄວນເພີ່ມທະວີການລົງໄປຮອດໄປເຖິງຊາວຜູ້ອອກແຮງງານເພື່ອເຜີຍແຜ່ໃຫ້ເຂົາເຈົ້າຊາບ ແລະ ເຂົ້າໃຈເຖິງນະໂນບາຍ, ລະບຽບການຕ່າງໆຂອງລັດຖະບານ ແລະ ສິດທິຂອງເຂົາເຈົ້າ ພ້ອມດ້ວຍການຈັດຕັ້ງປະຕິບັດກົດໝາຍ.ການບັງຄັບໃຊ້ກົດໝາຍ ກ່ຽວກັບ ການປະຕິບັດຄ່າຈ້າງຕໍ່າສຸດຄວນຖືເອົາມາເປັນວຽກງານບູລິມະສິດ.

## ການຮັບຮູ້ແຮງງານລາວທີ່ອອກໄປເຮັດວຽກຢູ່ຕ່າງປະເທດ

ແຮງງານລາວ ທີ່ອອກໄປເຮັດວຽກຢູ່ຕ່າງປະເທດທີ່ບໍ່ເປັນທາງການຄວນຈະໄດ້ຮັບການຊ່ວຍເຫຼືອທາງກົດໝາຍດ້ວຍວິທີຕໍ່ໄປນີ້:

1. ປັບປຸງລະບຽບການຕ່າງໆໃຫ້ມີຄວາມກະທັດຮັດ, ຫຼຸດຜ່ອນຄ່າໃຊ້ຈ່າຍໃນການເດີນທາງ, ຊ່ວຍຊອກຊ່ອງທາງໃນການເຂົ້າເຖິງວຽກ ແລະ ຫຼຸດຜ່ອນຂັ້ນຕອນຕ່າງໆທີ່ພົວພັນເຖິງການເຮັດວຽກ;

2. ຄວນທັນຊ່ອງທາງໃນການເດີນທາງ, ການໂອນເງິນກັບບ້ານ ແລະ ວິທີການຕ່າງໆທີ່ບໍ່ເປັນທາງການໃຫ້ຖືກກົດໝາຍ;

3. ຄວນໃຫ້ການຊ່ວຍເຫຼືອແກ່ບັນດາແຮງງານທີ່ກັບຄືນບ້ານໃຫ້ສາມາດເຂົ້າມາເຮັດວຽກງານເສດຖະກິດໄດ້ໃນເວລາທີ່ເຂົາເຈົ້າກັບຄືນມາລາວ.

## ການສ້າງລະດັບຄວາມອາດສາມາດໃຫ້ແກ່ປະຊາຊົນໂດຍການລົງທຶນໃສ່ມະນຸດ

ການລົງທຶນໃນການສ້າງຄົນ ເປັນການປັບປຸງຄວາມສາມາດຂອງເຂົາເຈົ້າໃນການສ້າງວຽກເຮັດງານທຳ ແລະ ຄວາມເຂັ້ມແຂງໃຫ້ແກ່ເຂົາເຈົ້າ. ສຳລັບລາວເຮົາແລ້ວ, ຄວນເອົາໃຈໃສ່ຮັບປະກັນໃຫ້ທຸກຄົນໄດ້ຮັບການສຶກສາຂັ້ນປະຖົມ (ອີງຕາມແນວທາງຂອງລັດຖະບານ ແລະ ເປົ້າໝາຍສະຫັດສະວັດ) ແລະ ການຂະຫຍາຍການສຶກສາເຕັກນິກ ແລະ ວິຊາຊີບທີ່ເນັ້ນຂະແໜງການ ຊຶ່ງສາມາດນຳໃຊ້ເຂົ້າໃນວຽກງານຕົວຈິງໄດ້ເປັນບູລິມະສິດສຳຄັນ.

### ການສຶກສາຂັ້ນປະຖົມ

ເພື່ອແກ້ໄຂບັນຫາການຂາດຄູ ຄວນສືບຕໍ່ຈັດຕັ້ງການສິດສອນຫ້ອງຄວບ ແລະ ສ້າງຕັ້ງກຸ່ມໂຮງຮຽນຂຶ້ນໃນເຂດທີ່ມີຄວາມຈຳເປັນ. ພ້ອມກັນນັ້ນກໍ່ຄວນສືບຕໍ່ສົ່ງເສີມປະຕິບັດນະໂຍບາຍສົ່ງຈູງໃຈໃຫ້ແກ່ຄູ, ເງິນອຸດໜູນການສິດສອນ, ການເຊີດຊູກຽດ ແລະ ຊື່ສຽງ, ການເລື່ອນຂັ້ນໄວ, ສາມາດເລືອກບ່ອນເຮັດວຽກໄດ້ຕາມໃຈພາຍຫຼັງທີ່ປະຕິບັດການສອນຫ້ອງຄວບໃນໄລຍະເວລາໃດໜຶ່ງ. ເພື່ອສະໜັບສະໜູນລະບົບການສອນຫ້ອງຄວບ, ໂຮງຮຽນສາມາດເລືອກເອົາຊາວບ້ານທີ່ໄດ້ຮັບການສຶກສາເຂົ້າມາຊ່ວຍ ໂດຍສະເພາະການແປພາສາໃນທ້ອງຖິ່ນທີ່ມີການໃຊ້ພາສາຊົນເຜົ່າ. ການມີລະບົບການຮຽນບຳລຸງ ເຊັ່ນ ການຈັດຕັ້ງຫ້ອງຮຽນເພີ່ມ ແລະ ຫ້ອງຮຽນເຊື່ອມຕໍ່ກໍ່ເປັນວິທີທີ່ເປັນປະໂຫຍດ. ການປະຕິບັດໂຄງການອາຫານສຳລັບໂຮງຮຽນ ກໍ່ສາມາດຊ່ວຍໃຫ້ນັກຮຽນບໍ່ເກີດຄວາມຫິວໃນເວລາຮຽນ ແລະ ມີສະມາທິຕໍ່ການຮຽນຂອງເຂົາເຈົ້າ. ການສ້າງໂຮງຮຽນພອນສະຫວັນກໍ່ສາມາດຊ່ວຍສ້າງມາດຕະຖານທາງດ້ານຄະນິດສາດ ແລະ ພາສາສາດໄດ້.

### ການສຶກສາເຕັກນິກ ແລະ ວິຊາຊີບ

ຫຼັກສູດການສຶກສາເຕັກນິກ ແລະ ວິຊາຊີບຄວນມີການປັບປຸງຄືນເພື່ອໃຫ້ສອດຄ່ອງກັບຄວາມຕ້ອງການຂອງ ຕະຫຼາດແຮງງານ. ຄວນມີນະໂຍບາຍສົ່ງເສີມຄວາມເປັນທຳໃນການເຂົ້າຮຽນໃນລະບົບເຕັກນິກ ແລະ ວິຊາຊີບ ເພື່ອຮັບປະກັນ ຕອບສະໜອງຕາມຄວາມຕ້ອງການຂອງຕະຫຼາດແຮງງານ ແລະ ການພັດທະນາຊັບພະຍາກອນມະນຸດໃຫ້ສອດຄ່ອງກັບຍຸດທະສາດການພັດທະນາຂອງຊາດເຮົາ. ບາງບາດກ້າວທີ່ຄວນສືບຕໍ່ສົ່ງ ເສີມເພື່ອປັບປຸງວຽກງານການສຶກສາພາກເຕັກນິກ ແລະ ວິຊາຊີບລວມມີດັ່ງນີ້: ເພີ່ມທະວີການຮ່ວມມືກັບສະຖາບັນການສຶກສາຕ່າງປະເທດເພື່ອແລກປ່ຽນຄູອາຈານ, ໃຫ້ພາກເອກະຊົນມີສ່ວນຮ່ວມໃນການບໍລິຫານ, ຈັດຕັ້ງການສອນພາສາອັງກິດ, ປັບປຸງຫ້ອງສະໝຸດ, ປັບປຸງເຄື່ອງມືສິດສອນ, ປະຕິບັດການສອນເປັນລະບົບໜ່ວຍກິດ, ທົບທວນເງື່ອນໄຂ ແລະ ມາດຕະຖານການຮັບສະໝັກນັກຮຽນ ແລະ ເປີດສອນຫຼັກສູດລະດັບປະລິນຍາໃນໂຮງຮຽນເຕັກນິກ-ວິຊາຊີບ.

ລະບົບດັ່ງກ່າວຄວນສະໜອງການຝຶກອົບຮົມໃຫ້ແກ່ຊາວໜຸ່ມທີ່ມີລາຍຮັບຕໍ່າ ແລະ ຜູ້ທີ່ໄດ້ຮຽນໜັງສືບໍ່ເກີນ 5-7 ປີ. ຄວນຈັດຕັ້ງໂຮງຮຽນຝຶກອົບຮົມໄລຍະສັ້ນ ແລະ ຈັດການສຳມະນາປະເພດໃໝ່ຂຶ້ນໃນຫຼາຍໆທ້ອງຖິ່ນ ແລະ ຄວນກະຈາຍສູນຮັບສະໝັກ ແລະ ສອບເສັງນັກຮຽນລົງໄປສູ່ທ້ອງຖິ່ນ. ຫຼັກສູດຝຶກອົບຮົມກໍ່ຄວນມີໃນໄລຍະເວລາຫຼາຍໆອາທິດ ຫຼື ຫຼາຍໆເດືອນ ແລະ ສາມາດປະກອບຄວາມຮູ້ໃຫ້ແກ່ແຮງງານທີ່ປະກອບອາຊີບອິດສະຫຼະ ແລະ ແຮງງານຮັບຈ້າງທົ່ວໄປໃນລາຄາຮຽນທີ່ຜ່ອນຜັນ.

ເນື່ອງຈາກວ່າ ລາວເຮົານັບມື້ນັບຈະກາຍເປັນປະເທດ ທີ່ອີງໃສ່ຂະແໜງການບໍ່ແຮ່ຫຼາຍຂຶ້ນ, ດັ່ງນັ້ນ ການຈັດຕັ້ງໃຫ້ມີໂຮງຮຽນ ຫຼື ຄະນະວິຊາບໍ່ແຮ່ ແລະ ທໍລະນີສາດ ໃນມະຫາວິທະຍາໄລຂອງລາວ ຈະເປັນບາດກ້າວທີ່ມີປະໂຫຍດຢ່າງຍິ່ງ.

### ດ້ານສຸຂະພາບ

ໃນຫຼາຍບັນຫາທາງດ້ານສຸຂະພາບທີ່ຄວນຈະແກ້ໄຂແມ່ນຄວນເອົາໃຈໃສ່ລົງທຶນໃສ່ ການສະໜອງນ້ຳດື່ມສະອາດ ແລະ ການຂ້າເຊື້ອພະຍາດ ໂດຍນຳໃຊ້ພະລັງງານແສງອາທິດ ເປັນວິທີການໜຶ່ງທີ່ບໍ່ແພງທີ່ຄວນນຳມາພິຈາລະນາ.

## ສິ່ງທ້າທາຍໃໝ່ໃນຕໍ່ໜ້າ

ບັນດາຂໍ້ສະເໜີແນະຂ້າງເທິງນັ້ນ ກໍ່ແມ່ນເພື່ອປະກອບເປັນຂໍ້ມູນໃຫ້ແກ່ການສ້າງແຜນພັດທະນາເສດຖະກິດ ແລະ ສັງຄົມ 5 ປີ

ຄັ້ງທີ່ VII ແລະ ການລິເລີ່ມຕ່າງໆທາງດ້ານນະໂຍບາຍພາກລັດ ເພື່ອບັນລຸເປົ້າໝາຍສະຫັດສະວັດ ແລະ ເປົ້າໝາຍອື່ນໆ ໃນ ປີ 2015 (ຫຼື 2020). ເຖິງຢ່າງໃດກໍ່ຕາມ, ລາວເຮົາ ກໍາລັງປະເຊີນກັບສິ່ງທ້າທາຍຕ່າງໆຫຼາຍຢ່າງເປັນຕົ້ນວິກິດການທາງການເງິນຂອງໂລກ ແລະ ເສດຖະກິດໂລກທີ່ຫົດຖອຍ. ຍ້ອນວ່າການພັດທະນາເສດຖະກິດຂອງລາວໃນຕໍ່ໜ້າ ແມ່ນຂຶ້ນຢູ່ກັບການເຊື່ອມໂຍງກັບເສດຖະກິດຂອງພາກພື້ນ ແລະ ຂອງໂລກ, ດັ່ງນັ້ນ ບັນຫາກໍ່ມີຢູ່ວ່າການຈັດຕັ້ງປະຕິບັດບັນດາຍຸດທະສາດເຫຼົ່ານັ້ນຈະຈັດຕັ້ງປະຕິບັດຄືແນວໃດ. ເພື່ອຄວາມກະຈ່າງແຈ້ງ ຂໍໃຫ້ເບິ່ງລາຍລະອຽດດັ່ງຕໍ່ໄປນີ້:

## ບັນຫາສໍາຄັນ

*ການຈ້າງງານໂດຍກົງ:* ເຖິງແມ່ນວ່າຈະມີນະໂຍບາຍມາຮອງຮັບຂະແໜງແຜ່ນແພ ແລະ ຕັດຫຍິບ ກໍ່ຕາມ (ຕາມທີ່ໄດ້ສະເໜີໄວ້ໃນພາກທີ 3), ແຕ່ການຂາຍສິນຄ້າ ໄປປະເທດຕາເວັນຕົກ ກໍ່ອາດພົບຄວາມຫຍຸ້ງຍາກຍ້ອນວ່າ ປະເທດເຫຼົ່ານັ້ນ ກໍາລັງປະເຊີນກັບບັນຫາວິກິດການທາງດ້ານເສດຖະກິດ. ບັນຫານີ້ໄດ້ກະທົບຕໍ່ທຸກຂະແໜງການສົ່ງອອກ. ຖ້າຫາກສະພາບເສດຖະກິດໂລກທີ່ຫົດຖອຍເຮັດໃຫ້ບັນດານັກທ່ອງທ່ຽວບໍ່ ສາມາດເດີນທາງມາທ່ອງທ່ຽວໄດ້ກໍ່ຈະເຮັດໃຫ້ຂະແໜງໂຮງແຮມ, ຮ້ານອາຫານ ແລະ ການຂົນສົ່ງໃນປະເທດ ເຮົາໄດ້ຮັບຜົນກະທົບໂດຍກົງ ແລະ ເຮັດໃຫ້ສະພາບການຈ້າງງານຫຼຸດລົງ. ພ້ອມກັນນັ້ນ, ບັນຫາເສດຖະກິດຂອງປະເທດໄທທີ່ຂະຫຍາຍໂຕຊ້າລົງອາດເຮັດໃຫ້ຄວາມຕ້ອງການແຮງງານຈາກລາວຫຼຸດໜ້ອຍລົງ ເຊັ່ນກັນ ແລະ ສົ່ງຜົນກະທົບໃຫ້ແກ່ຊ່ອງທາງການຈ້າງງານອີກຊ່ອງທາງໜຶ່ງ.

*ຜົນກະທົບທາງອ້ອມຈາກແຮງກົດດັນທາງດ້ານການເງິນ:* ເນື່ອງຈາກວ່າລາຄາຄໍາ (ແຮ່ທາດຕົ້ນຕໍ) ຫຼຸດລົງເຖິງ 60-70% ຈຶ່ງເຮັດໃຫ້ລາຍຮັບງົບປະມານຈາກຂະແໜງບໍ່ແຮ່ໃນອະນາຄົດອັນໃກ້ນີ້ບໍ່ສາມາດບັນລຸຕາມແຜນ ແລະ ເຮັດໃຫ້ລັດຖະບານຕ້ອງຫຼຸດຜ່ອນການໃຊ້ຈ່າຍເຂົ້າໃນດ້ານສັງຄົມ. ການລົງທຶນຫຼຸດລົງໃນຂະແໜງການພະລັງງານໄຟຟ້າກໍ່ຈະສົ່ງຜົນກະທົບຄ້າຍຄືກັນ. ເຖິງແມ່ນວ່າໃນປັດຈຸບັນນີ້ການໄຫຼຂອງເງິນທຶນຊ່ວຍເຫຼືອ ພາຍໃຕ້ການຮ່ວມມືດ້ານການພັດທະນາທີ່ເຂົ້າມາຍັງປະເທດເຮົາ ອາດຈະຍັງບໍ່ມີຜົນກະທົບຫຼາຍກໍ່ຕາມ ແຕ່ຖ້າຫາກບັນຫາການຫົດຖອຍຂອງເສດຖະກິດໂລກ ຍັງສືບຕໍ່ແກ່ຍາວໄປອີກ ກໍ່ອາດສົ່ງຜົນໃຫ້ປະເທດຜູ້ໃຫ້ການຊ່ວຍເຫຼືອພິຈາລະນາບູລິມະສິດຂອງການຊ່ວຍເຫຼືອຄືນໃໝ່.

ສະນັ້ນ, ຈຶ່ງເປັນການຍາກທີ່ຈະສະຫຼຸບວ່າວິກິດການຄັ້ງນີ້ຮ້າຍແຮງຫຼາຍປານໃດ ແຕ່ວ່າອາດສາມາດປ່ຽນວິກິດການໃນຄັ້ງນີ້ໃຫ້ເປັນໂອກາດໄດ້ ຖ້າຫາກຈັດຕັ້ງປະຕິບັດມາດຕະການທີ່ເໝາະສົມ.

## ບາງວິທີການແກ້ໄຂ

ໃນເວລາທີ່ສືບຕໍ່ປະຕິບັດຄວາມພະຍາຍາມໃນການຍົກສູງຄຸນນະພາບຊີວິດຂອງປະຊາຊົນໃຫ້ດີຂຶ້ນໂດຍຜ່ານຂະບວນການວາງແຜນນັ້ນ ກໍ່ຄວນເອົາໃຈໃສ່ເປັນພິເສດຕໍ່ການແກ້ບັນຫາສະເພາະໜ້າທີ່ເກີດຂຶ້ນ. ການລິເລີ່ມທີ່ເປັນໄປໄດ້ ເພື່ອແກ້ບັນຫາດັ່ງກ່າວແມ່ນການສ້າງ ຫຼື ຂະຫຍາຍມາດຕະການປ້ອງກັນໂດຍສະເພາະແກ່ຜູ້ທີ່ມີຄວາມສ່ຽງທີ່ຈະຖືກກະທົບຫຼາຍທີ່ສຸດ. ການໃຫ້ໂອກາດແກ່ປະຊາຊົນໄດ້ເຮັດວຽກໃນໂຄງການລົງທຶນຂອງລັດໃນທ້ອງຖິ່ນຂອງຕົນກໍ່ແມ່ນວິທີການໜຶ່ງທີ່ມີປະໂຫຍດເພາະມັນສາມາດເຮັດ2ໜ້າທີ່ໄປພ້ອມໆກັນ ຄືການສ້າງວຽກເຮັດງານທໍາໃຫ້ແກ່ແຮງງານບໍ່ມີສີມື ຫຼື ແຮງງານເຄິ່ງສີມືພ້ອມກັບ ການສ້າງພື້ນຖານໂຄງລ່າງໃນເຂດຊົນນະບົດ. ນອກຈາກນີ້, ລັດຖະບານ ຄວນສືບຕໍ່ຊຸກຍູ້ໃຫ້ທ້ອງຖິ່ນເພີ່ມທະວີປະກອບທຶນຮອນເຂົ້າໃນການສ້າງໂຮງຮຽນ, ໂຮງໝໍ ແລະ ໂຄງລ່າງພື້ນຖານສໍາຄັນອື່ນໆທີ່ຈໍາເປັນໃນການເພີ່ມລະດັບການພັດທະນາມະນຸດ. ການສົ່ງເສີມຂະແໜງກະສິກໍາກໍ່ຈະເປັນປະໂຫຍດມະຫາສານ.

**ຮູບສະແດງ 7.1: ແຜນວາດທາງເລືອກທາງດ້ານນະໂຍບາຍເພື່ອປັບປຸງວຽກເຮັດງານທຳ ແລະ ເງື່ອນໄຂການເຮັດວຽກໃຫ້ແກ່ການພັດທະນາມະນຸດ**



# ເອກະສານອ້າງອີງ



# ເອກະສານອ້າງອີງ


**Acharya Sarthi (1983),** 'ວ່າດ້ວຍເກນຜະລິດຕະພາບຂອງການຫວ່າງງານໃນເສດຖະກິດກະສິກຳທຳມະຊາດ' *ການພັດທະນາ ແລະ ການປ່ຽນແປງ,* ສະບັບທີ 14, ເລກທີ 4.

**Acharya Sarthi (1990),** *ການເຂົ້າສູ່ຕະຫຼາດແຮງງານ: ແຜນງານຄ້ຳປະກັນວຽກເຮັດງານທຳ ຢູ່ມະຫາຣາສຕຣາ,* ນິວເດລີ: ILO-ທີມສົ່ງເສີມການສ້າງວຽກເຮັດງານທຳໃນຂົງເຂດອາຊຽນ.

**Acharya Sarthi, Sandhya Iyer ແລະ Ashok Basak (2005),** *ກ້າວໄປສູ່ການສ້າງຄວາມເຂັ້ມແຂງໃຫ້ແກ່ການວາງແຜນພັດທະນາມະນຸດຂັ້ນເມືອງ,* ສູນຂໍ້ມູນເພື່ອການພັດທະນາມະນຸດ, ນິວເດລີ: ຫ້ອງການ UNDP.

**Acharya Sarthi ແລະ AV Jose (1991),** *ການເຄື່ອນຍ້າຍແຮງງານ ແລະ ລາຍຮັບໃນຄົວເຮືອນທີ່ມີລາຍຮັບຕ່ຳ,* Working Paper, ນິວເດລີ: ILO-ທີມສົ່ງເສີມການສ້າງວຽກເຮັດງານທຳໃນຂົງເຂດອາຊຽນ.

**Acharya Sarthi, Gustav F Papanek (1995),** *'ຄ່າແຮງງານເຮັດວຽກໃນການຜະລິດກະສິກຳ ແລະ ຄວາມທຸກຍາກຊົນນະບົດຢູ່ອິນເດຍ'* ວາລະສານນະໂຍບາຍການພັດທະນາ, ສະບັບທີ13, ເລກທີ1.

**Alexander S Preker, Guy Carrin, David Dror, Melitta Jakab, William Hsiao, Dyna Arhin-Tenkorang (2002),** *'ປະສິດທິຜົນຂອງການສະໜອງທຶນຮັກສາສຸຂະພາບຊຸມຊົນ ເພື່ອໃຫ້ພຽງພໍກັບຄ່າໃຊ້ຈ່າຍດ້ານການປິ່ນປົວສຸຂະພາບ'* Bulletin of the World Health Organisation (ເຈນີວາ: WHO) 80(2).

**Andersson Magnus, Anders Engvall, Ari Kokko (2006),** *ປັດໄຈກຳນົດຄວາມທຸກຍາກຢູ່ ສປປ ລາວ,* Working Paper 233, ສະຕອກໂຮມ: Stockholm School of Economics.

**Amjad Rashid (ed.) (1990),** *ອອກໄປຫາອ່າວທະເລ ແລະ ກັບຄືນມາ,* ນິວເດລີ: ILO-ທີມສົ່ງເສີມການສ້າງວຽກເຮັດງານທຳໃນຂົງເຂດອາຊຽນ.

**ADB (Asian Development Bank) (2000),** *ຍຸດທະສາດການພັດທະນາການເງິນຈຸລະພາກ,* ມານີລາ.

**ADB (2007),** *ຫຼຸດຜ່ອນຂໍ້ຈຳກັດດ້ານການລົງທຶນເພື່ອອັດຕາການເຕີບໂຕທີ່ສູງຂຶ້ນ - ການປະເມີນສະພາບການລົງທຶນພາກເອກະຊົນຢູ່ ສປປ ລາວ,* ມານີລາ (ຮ່ວມກັບທະນາຄານໂລກ). http://www.adb.org/documents/policies/microfinance/financepolidy.pdf

**ARENA (ການແລກປ່ຽນໃນຂົງເຂດອາຊຽນສຳລັບທາງເລືອກໃໝ່), (1992),** *'ບັນຫາສະເພາະກ່ຽວກັບການເຄື່ອນຍ້າຍແຮງງານສາກົນ',* Asian Exchange, ສະບັບທີ 8, ເລກທີ 3/4.

**Baird Ian G ແລະ Bruce Shoemaker (2005),** *ການຊ່ວຍເຫຼືອ ຫຼື ການສະໜັບສະໜູນ: ການຕັ້ງຖິ່ນຖານໃໝ່ພາຍໃນ ແລະ ອົງການຊ່ວຍເຫຼືອສາກົນຢູ່ ສປປ ລາວ,* ໂຕລັນໂຕ: Probe International.

**Ballard Brett M (2005),** *Land-level Bureaucrats in Action (and Inaction): ພະນັກງານລະດັບພື້ນຖານທີ່ລົງມືປະຕິບັດ (ແລະ ບໍ່ປະຕິບັດ): ການກະຈາຍການບໍລິການດ້ານສັດຕະວະແພດຢູ່ ລາວ ແລະ ກຳປູເຈຍ,* ບົດວິທະຍານິພົນປະລິນຍາເອກ, ກົມຄົ້ນຄວ້າ ແລະ ວາງແຜນຕົວເມືອງ, ແຄມບຣິດຈ: Technological Institute of Massachusetts.

# ເອກະສານອ້າງອີງ


**Bangasser, Paul E (2000),** *ອົງການແຮງງານສາກົນ ແລະ ຂະແໜງການນອກລະບົບ: ປະຫວັດສາດດ້ານສະຖາບັນ,* ຂະແໜງການຈັດຫາວຽກເຮັດງານທຳ, ເຈເນວາ: ອົງການແຮງງານສາກົນ.

**Bardhan Pranab K (1978),** 'ວ່າດ້ວຍການປະເມີນການຫວ່າງງານຊົນນະບົດ', *Journal of Development Studies,* ສະບັບທີ 14, ເຫຼັ້ມທີ 3

**Becker Gary S (1993),** *ທຶນມະນຸດ: ການວິໄຈທາງດ້ານທິດສະດີ ແລະ ພາກປະຕິບັດ, ໂດຍອີງໃສ່ການສຶກສາ,* ຊີຄາໂກ: Chicago University Press.

**Besley T ແລະ Louise J Cord (eds.) (2007),** *ການໃຫ້ບໍລິການຕາມສັນຍາ ຂອງການເຕີບໂຕທີ່ເນັ້ນໃສ່ຄວາມທຸກຍາກ: ແນວຄວາມຄິດ ແລະ ບົດຮຽນຈາກປະສົບການຂອງປະເທດ,* ວໍຊິງຕັນ: ທະນາຄານໂລກ, ແລະ ນິວຢອກ: Palgrave Macmillan

**ບົວທອນ ບຸນທອງ, ລີນຄຳ ດວງສະຫວັດ ແລະ Jonathan Rigg (2004),** *'ສ້າງການດຳລົງຊີວິດແບບຍືນຍົງຢູ່ລາວ: ການແກ້ໄຂບັນຫາເຂດກະສິກຳຈາກຄວາມກ້າວໜ້າທາງດ້ານກິດຈະກຳທີ່ບໍ່ແມ່ນກະສິກຳອອກຈາກຄວາມທຸກຍາກ',* Geoforum, 35, pp 607-619.

**Breman Jan C (1980),** *ການຄົ້ນຄວ້າກ່ຽວກັບຂະແໜງການນອກລະບົບ: ທິດສະດີ ແລະ ພາກປະຕິບັດຕົວຈິງ,* ລອດເຕີດັມ: ມະຫາວິທະຍາໄລ Erasmus, ແຜນງານສຶກສາປຽບທຽບອາຊຽນ 3.

**Breman Jan C ແລະ S Mundle (1991) (eds.),** *ການປ່ຽນແປງຢູ່ເຂດຊົນນະບົດອາຊີ,* ນິວເດລີ: Oxford University Press.

**Chamberlain James R (2007),** *ການປະເມີນຄວາມທຸກຍາກແບບມີສ່ວນຮ່ວມ 2006,* ວຽງຈັນ: ສູນສະຖິຕິແຫ່ງຊາດ/ທະນາຄານພັດທະນາອາຊີ

**Chamberlain James R ແລະ Phomsombath (2002),** *ການຫຼຸດຜ່ອນຄວາມທຸກຍາກສຳລັບທຸກຄົນ: ທ່າແຮງ ແລະ ທາງເລືອກຂອງປະຊາຊົນຢູ່ເຂດພູດອຍ,* ວຽງຈັນ: SIDA.

**Chanda Nayan (1983),** *ສັດຕູຮຸ່ນອ້າຍ: ສົງຄາມຫຼັງຈາກສົງຄາມ,* ບາງກອກ: White Lotus.

**Chan Sophal ແລະ Sarthi Acharya (2002),** *'ປະເຊີນໜ້າກັບຄວາມທ້າທາຍດ້ານການດຳລົງຊີວິດຢູ່ຊົນນະບົດ: ມຸມມອງຈາກເກົ້າໝູ່ບ້ານຂອງກຳປູເຈຍ',* Working Paper 25, ພະນົມເປັນ: ສະຖາບັນວິໄຈເພື່ອການພັດທະນາກຳປູເຈຍ.

**ຈັນທະວິສຸກ, ກ. (2006),** *ການສົ່ງອອກແຮງງານ: ປະກອບສ່ວນເຂົ້າໃນການພັດທະນາຂອງລາວ,* Technical Background Paper, ບົດລາຍງານການພັດທະນາມະນຸດແຫ່ງຊາດ, ວຽງຈັນ.

**Chanthavanich, Vungsiriphisal, ແລະ Laodumrongchai (2007),** *ນະໂຍບາຍຂອງໄທຕໍ່ແຮງງານເຄື່ອນຍ້າຍຈາກພະມ້າ,* ບາງກອກ: ສູນຄົ້ນຄວ້າອາຊຽນ ສຳລັບການເຄື່ອນຍ້າຍແຮງງານໄປເຮັດວຽກຕ່າງປະເທດ, ສະຖາບັນການວິໄຈອາຊຽນ (ARCM), ມະຫາວິທະຍາໄລຈຸລາລົງກອນ

**Churchill C (ed.) (2006),** *ການປົກປ້ອງຄົນທຸກ: ບົດສະຫຼຸບຫຍໍ້ກ່ຽວກັບການຄ້ຳປະກັນຈຸລະພາກ,* ເຈເນວາ: ILO.

# ເອກະສານອ້າງອີງ


**Curran, Garip, Chung ແລະ Tangchonlatip (2003),** *ການເຄື່ອນຍ້າຍແຮງງານໄປເຮັດວຽກຢູ່ຕ່າງປະເທດ, ເງິນກະທົບສະສົມ ແລະ ບົດບາດຍິງຊາຍ: ຫຼັກຖານຈາກປະເທດໄທ.*

**DAN (ເຄືອຂ່າຍການຄົ້ນຄວ້າເພື່ອການພັດທະນາ) (2002),** *ຕະຫຼາດແຮງງານໃນເສດຖະກິດຂວ້າມຜ່ານຢູ່ອາຊີຕາເວັນອອກສຽງໃຕ້ ແລະ ປະເທດໄທ,* ພະນົມເປັນ: ສະຖາບັນວິໄຈເພື່ອການພັດທະນາກຳປູເຈຍ.

**Dasgupta Biplab (1978),** *ສັງຄົມບ້ານ ແລະ ການນຳໃຊ້ແຮງງານ,* Oxford: Oxford University Press.

**Devereux S ແລະ C Solomon (2005),** 'ແຜນງານສ້າງວຽກເຮັດງານທຳ: ປະສົບການສາກົນ', *ກອງປະຊຸມໂຕະມົນກ່ຽວກັບແຜນງານຄ້ຳປະກັນແຫ່ງຊາດຢູ່ອິນເດຍ,* ສິງຫາ 30-31, ນິວເດລີ: ILO.

**Deshpande Sudha ແລະ LK Deshpande (1990),** *ການເຄື່ອນຍ້າຍແຮງງານຢູ່ຂະແໜງອຸດສາຫະກຳຂອງເມືອງບອມເບ,* ເຈເນວາ: ILO.

**Dror D ແລະ Ch Jacquier (1999),** 'ການຄ້ຳປະກັນຈຸລະພາກ: ການຂະຫຍາຍການປະກັນສຸຂະພາບໄປສູ່ຜູ້ທີ່ບໍ່ເຄີຍຢູ່ໃນແຜນ', *International Social Security Review* (ເຈເນວາ: ISSA) 52(1): pp 71–97, doi:10.1111/1468-246X.00034.

**Ducourtieux Olivier, Jean-Richard Laffort ແລະ Silithone Sacklokham (2005),** 'ນະໂຍບາຍທີ່ດິນ ແລະ ການເຮັດສວນຢູ່ລາວ', *ການພັດທະນາ ແລະ ການປ່ຽນແປງ,* ສະບັບທີ 36, No 3.

**Dwyer Mike (2007),** *ຫັນປ່ຽນດິນມາເປັນທຶນ: ການທົບທວນການຄົ້ນຄວ້າໃນປະຈຸບັນ ກ່ຽວກັບການສຳປະທານທີ່ດິນສຳລັບການລົງທຶນຢູ່ ສປປ ລາວ,* ວຽງຈັນ: CIDSE, CONCERN, GTZ, HELVESTA, Plan International, VECO.

**Engvall Anders (2006),** *'ຊົນເຜົ່າສ່ວນໜ້ອຍ ແລະ ຄວາມທຸກຍາກຊົນນະບົດຢູ່ ລາວ,* Stockholm: Stockholm School of Economics.

**Engvall Anders, Alessandro Magnoli ແລະ Kaspar Richter (2005),** *Growth and Poverty in Lao PDR,* November 2005, Stockholm: Stockholm School of Economics.

**Evans Grant (2002),** *'ປະຫວັດສາດລາວໂດຍຫຍໍ້–ແຜ່ນດິນລະຫວ່າງກາງ',* ບາງກອກ: ສຳນັກພິມ ໜອນໜັງສື.

**Evarard Olivier ແລະ Yves Goudineau (2004),** 'ການຍົກຍ້າຍຖິ່ນຖານທີ່ມີການວາງແຜນ, ການເຄື່ອນຍ້າຍແຮງງານໂດຍທີ່ບໍ່ໄດ້ຄາດຫວັງໄວ້ ແລະ ຄວາມເຈັບປວດທາງດ້ານສັງຄົມໃນການພັດທະນາ ແລະ ການປ່ຽນແປງຢູ່ລາວ', *ການພັດທະນາ ແລະ ການປ່ຽນແປງ,* Volume 35, ເລກທີ 5.

**Fukuda-Parr Sakiko ແລະ AK Shiva Kumar (2004), (eds.),** *ບົດອ່ານກ່ຽວກັບການພັດທະນາມະນຸດ',* ນິວເດລີ: Oxford University Press.

**Gayfer M. ແລະ Joel Gajadharsingh (1991),** *ຫ້ອງຮຽນຫ້ອງຄວບ: ຄວາມລຶກລັບ ແລະ ຄວາມເປັນຈິງ,* Toronto: Canadian Education Association.

# ເອກະສານອ້າງອີງ


**Gerxhani Klarita (2005),** *ຂະແໜງການນອກລະບົບໃນປະເທດທີ່ພັດທະນາແລ້ວ ແລະ ດ້ອຍພັດທະນາ: ການສຳຫຼວດດ້ານວັນນະກຳ, TI 1999-03/2,* Amsterdam: Amsterdam Institute for Advanced Labour Studies/Amsterdam School for Social Science Research, University of Amsterdam.

**GOI (ລັດຖະບານອິນເດຍ) (2003),** *ຄູ່ມືການວາງແຜນງານ 10 NSS,* ນິວເດລີ: ອົງການສະຖິຕິສູນກາງ.

**GOL (ລັດຖະບານລາວ) (1994),** *ການສຳຫຼວດການໃຊ້ຈ່າຍ ແລະ ການຊົມໃຊ້ຂອງຄົວເຮືອນ ປີ 1992/93,* ວຽງຈັນ: ສູນສະຖິຕິແຫ່ງຊາດ.

**GOL (1997),** *ການສຳຫຼວດພົນລະເມືອງ ແລະ ທີ່ຢູ່ອາໄສແຫ່ງຊາດປີ 1995,* ວຽງຈັນ: ສູນສະຖິຕິແຫ່ງຊາດ.

**GOL (1999),** *ການສຳຫຼວດການໃຊ້ຈ່າຍ ແລະ ການຊົມໃຊ້ຂອງຄົວເຮືອນ ໃນປີ 1997/98,* ວຽງຈັນ: ສູນສະຖິຕິແຫ່ງຊາດ.

**GOL (2004),** *ການສຳຫຼວດການໃຊ້ຈ່າຍ ແລະ ການຊົມໃຊ້ຂອງຄົວເຮືອນ ໃນປີ 2002/03,* ວຽງຈັນ: ສູນສະຖິຕິແຫ່ງຊາດ.

**GOL (2005),** *'ກົດໝາຍວິສາຫະກິດ',* Vientiane ວຽງຈັນ (ສະໜັບສະໜູນໂດຍ IFC ແລະ MPDF).

**GOL (2006a),** *ການສຳຫຼວດພົນລະເມືອງ ແລະ ທີ່ຢູ່ອາໄສແຫ່ງຊາດ ໃນປີ 2005,* ວຽງຈັນ: ສູນສະຖິຕິແຫ່ງຊາດ.

**GOL (2006b),** *ຍຸດທະສາດວ່າດ້ວຍການເຕີບໂຕ ແລະ ລຶບລ້າງຄວາມທຸກຍາກແຫ່ງຊາດ,* ວຽງຈັນ: ຄະນະກຳມະການ ແຜນການ ແລະ ການລົງທຶນ.

**GOL (2006c),** *ແຜນການພັດທະນາເສດຖະກິດ-ສັງຄົມແຫ່ງຊາດ (2006-2010),* ວຽງຈັນ.

**GOL (2007a),** *ຂໍ້ມູນລາຍຮັບແຫ່ງຊາດ,* ວຽງຈັນ: ສູນສະຖິຕິແຫ່ງຊາດ.

**GOL (2007b),** *ການສຳຫຼວດຈັດແບ່ງກຸ່ມຕົວຊີ້ວັດແບບປະສົມຕ່າງໆ ຂອງປີ 2006,* ວຽງຈັນ: ສູນສະຖິຕິແຫ່ງຊາດ.

**GOL (2007c),** *ການສຳຫຼວດທາງດ້ານເສດຖະກິດ 2006,* ວຽງຈັນ: ສູນສະຖິຕິແຫ່ງຊາດ [EC-06].

**GOL (2008a),** *ສະຖິຕິປະຈຳປີ 2007,* ວຽງຈັນ: ກະຊວງແຜນການ ແລະ ການລົງທຶນ.

**GOL (2008b),** *ຍຸດທະສາດການປະຕິຮູບລະບົບການສຶກສາແຫ່ງຊາດ (NESRS) 2006-2015,* ວຽງຈັນ: ກະຊວງສຶກສາທິການ (ສະບັບຮ່າງ).

**GOL-EC-UNDP (2004),** *ທາງເລືອກໃນການໃຫ້ບໍລິການ ແລະ ການຈັດສັນພູມລຳເນົາ ສຳລັບການວາງແຜນພັດທະນາ,* ວຽງຈັນ: UNDP

**GOL-JICA (2008),** *ບົດປະກອບຄຳເຫັນກ່ຽວກັບກົດໝາຍວິສາຫະກິດ,* ວຽງຈັນ.

# ເອກະສານອ້າງອີງ

**GOL-UNDP (2006),** *ບົດລາຍງານການພັດທະນາມະນຸດແຫ່ງຊາດ: ການຄ້າລະຫວ່າງປະເທດ ແລະ ການພັດທະນາມະນຸດ, Lao PDR 2006,* ວຽງຈັນ: ຄະນະກຳມະການແຜນການ ແລະ ການລົງທຶນ.

**GOL-UNDP (2008),** *ເປົ້າໝາຍສະຫັດສະວັດ ຄັ້ງທີສອງ: ບົດລາຍງານຄວາມກ້າວໜ້າຂອງ ສປປ ລາວ,* Vientiane.

**Grace DC (2005),** 'ຄົ້ນຫາປະສົບການດຳເນີນງານສະຫະພັນສິນເຊື່ອ ທີ່ມີການສົ່ງເງິນກັບບ້ານ ຢູ່ຕະຫຼາດອາເມລິກາລາຕິນ', in Samuel M Maimbo ແລະ Dilip Ratha (eds.) *ເງິນໂອນກັບບ້ານ: ຜົນກະທົບດ້ານການພັດທະນາ ແລະ ມຸມມອງໃນອານາຄົດ,* ວໍຊິງຕັນ: World Bank.

**Grinspun Alejandro (2004),** *'ການເຕີບໂຕທີ່ເນັ້ນໃສ່ຄົນທຸກຍາກ: ຊອກຫາຈາກສັກສິດ',* ສູນຄວາມທຸກຍາກສາກົນ, ເລກທີ 6, Brasilia: UNDP.

**GTZ (2006),** *ບົດລາຍງານການສຳຫຼວດວິສາຫະກິດພື້ນຖານ (Baseline),* Volume 1, ວຽງຈັນ.

**Hayami Y ແລະ M Kikuchi (1981),** *ທາງຄົບຂອງເສດຖະກິດບ້ານອາຊຽນ: ວິທີການທາງດ້ານເສດຖະກິດໄປສູ່ການປ່ຽນແປງທາງດ້ານການຈັດຕັ້ງ,* Tokyo: University of Tokyo Press.

**Hayami Y. ແລະ Vermon Ruttan (1971),** *ການພັດທະນາກະສິກຳ: ມຸມມອງສາກົນ,* Baltimore: The Johns Hopkins Press.

**Hernandez-Coss (2005),** *'ກອບການສະເໜີເພື່ອວິໄຈລະບົບການໂອນເງິນແບບບໍ່ເປັນທາງການ",* World Bank, ໜ້າ 11-13.

**Huguet, J. W ແລະ S. Punpuing (2005),** *ການເຄື່ອນຍ້າຍແຮງງານສາກົນຢູ່ປະເທດໄທ,* ບາງກອກ: ອົງການສາກົນດ້ານການເຄື່ອນຍ້າຍແຮງງານ.

**Humphreys Macartan, Jeffrey Sachs ແລະ Joseph Stiglitz (2007), (eds.),** *ໜີອອກຈາກຄຳສາບດ້ານຊັບພະຍາກອນ,* New York: Columbia University Press.

**Kerblay, Basile (1966),** 'ປະຫວັດຂອງທ່ານ A. V. Chayanov: ຊີວິດ, ອາຊີບ ແລະ ການງານ", ໃນບົດຂອງ Chayanov, Aleksandr V: ທິດສະດີດ້ານເສດຖະກິດຂອງຊາວຊົນນະບົດ', (Eds.) Daniel Thorner, Basile Kerblay, REF Smith, IL Homewood: Richard Irwin (American Economic Association).

**ILO (ອົງການແຮງງານສາກົນ) (1999),** *'ວຽກດີມີຄຸນຄ່າ–ບົດລາຍງານຂອງອຳນວຍການໃຫຍ່,* ເຈເນວາ.

**ILO (2000),** ບົດລາຍງານວາລະກອງປະຊຸມ *'ກອງປະຊຸມລະດັບຊາດກ່ຽວກັບຍຸດທະວິທີໃນການສ້າງວຽກເຮັດງານທຳໃນຂະແໜງການທີ່ບໍ່ເປັນທາງການໃນເຂດຕົວເມືອງໃນອິນເດຍ',* Surajkund, ສຸຣັກຄຸນ, 17-19 ກຸມພາ 2000, http://www.ilo.org/public/english/bureau/dgo/newdelhi.htm

**ILO (2001),** *ການໃຫ້ບໍລິການດ້ານການພັດທະນາດ້ານທຸລະກິດແກ່ວິສາຫະກິດ,* http://oracle02.ilo.org/dyn/empent.Portal.Portal?P.Prog=S&P=BD

# ເອກະສານອ້າງອີງ

**ILO (2003),** *ກັບບ້ານ: ກັບຄືນມາ ແລະ ເຕົ້າໂຮມກັນ,* ປຶ້ມນ້ອຍເຫຼັ້ມທີ 5, ແຜນງານການສົ່ງເສີມບົດບາດຍິງຊາຍ, ເຈເນວາ.

**ILO (2007a),** *ການສົ່ງເງິນກັບບ້ານຂອງແຮງງານທີ່ເຮັດວຽກຢູ່ຕ່າງປະເທດ ແລະ ຜົນກະທົບຕໍ່ການພັດທະນາເສດຖະກິດທ້ອງຖິ່ນ: ບົດລາຍງານການສຳຫຼວດ,ສະບັບຮ່າງ,* ILO ຫ້ອງການສາຂາຂອງຂົງເຂດ.

**ILO (2007b),** *ໂອກາດ ແລະ ການປະຕິບັດນະໂຍບາຍເທົ່າທຽມກັນຢູ່ສະຖານທີ່ເຮັດວຽກຢູ່ ສປປ ລາວ: ປຽບທຽບລະຫວ່າງ ມາດຕະຖານແຮງງານສາກົນ ແລະ ກົດໝາຍແຫ່ງຊາດ ແລະ ການປະຕິບັດກົດ ໝາຍຢູ່ ສປປ ລາວ,* ບາງກອກ: ILO SRO.

**ILO ແລະ Bappenas (2005),** *ແຜນງານການຄ້ຳປະກັນດ້ານວຽກເຮັດງານທຳແຫ່ງຊາດສຳລັບປະເທດອິນໂດເນເຊຍ: ວິທີການ,* Jakarta.

**ILO (2006),** 'ຍຸດທະສາດການສ້າງວຽກເຮັດງານທຳສຳລັບວຽກທີ່ດີມີຄຸນຄ່າ: ແນວຄວາມຄິດ, ວິທີການ ແລະ ເຄື່ອງມືໃນການຈັດຕັ້ງປະຕິບັດແຜນດຳເນີນການສ້າງວຽກເຮັດງານທຳລະດັບໂລກ', *ຄະນະກຳມະການເພື່ອການຈັດຫາງານ ແລະ ນະໂຍບາຍສັງຄົມ,* GB.295/ESP/1/1 295th Session, ເຈເນວາ.

**Ishikawa Shigeru (1967),** *ການພັດທະນາເສດຖະກິດຕາມມຸມມອງຂອງອາຊຽນ,* ໂຕກຽວ: Kinokuniya Bookstore.

**Ishikawa Shigeru (1981),** *ການຮອງຮັບເອົາແຮງງານຕາມມຸມມອງຂອງອາຊຽນ,* ບາງກອກ: ILO-ARTEP.

**Jaysuriya SK ແລະ RT Chand (1986),** 'ການປ່ຽນແປງທາງດ້ານເຕັກໂນໂລຊີ ແລະ ການຮອງຮັບເອົາແຮງງານຢູ່ຂະແໜງກະສິກຳອາຊຽນ: ທ່າອ່ຽງທີ່ເກີດຂຶ້ນ', *ວາລະສານ World Development, ສະບັບທີ 14, ເລກທີ 3.*

**Johnson JV ແລະ J Lipscomb (2006),** 'ຊົ່ວໂມງເຮັດວຽກທີ່ດົນ, ຄວາມໝັ້ນຄົງທາງດ້ານອາຊີບ ແລະ ລັກສະນະການປ່ຽນແປງຂອງອົງການເຮັດວຽກ', *American Journal Industrial Medicine,* 49, pp 921-929.

**ສຸພັນ ແກ້ວມີໄຊ , ບຸນທະວີ ສີສຸພັນທອງ, ລີເບີ ລີບົ໋ວປາວ, ພອນສະຫຼີ ສຸກສະຫວັດ ແລະ ເພັດສະໝອນ ສອນ (2003),** ການຈ້າງງານນອກລະດູ ແລະ ນອກຂະແໜງກະສິກຳ, ແລະ ກິດຈະກຳຕ່າງໆຢູ່ໃນ ສປປ ລາວ, ໃນບົດຂອງ DAN (E.d.), *'ການຈ້າງງານນອກລະດູ ແລະ ນອກຂະແໜງກະສິກຳໃນເສດຖະກິດຂ້ວາມຜ່ານຂອງອາຊີຕາເວັນອອກສຽງໃຕ້ ແລະ ປະເທດໄທ',* CDRI: ພະນົມເປັນ.

**Khruemanee, T. (2007),** *ແຮງງານທີ່ໄປເຮັດວຽກຢູ່ຕ່າງປະເທດ ແລະ ສິດທິຂອງເຂົາເຈົ້າໃນການເບິ່ງແຍງສຸຂະພາບ,* Bangkok: UNESCO.

**Kim Sedara, Sophal Chan ແລະ Sarthi Acharya (2002),** *'ທີ່ດິນ, ຊີວິດການເປັນຢູ່ຊົນນະບົດ ແລະ ການຄ້ຳປະກັນທາງດ້ານສະບຽງອາຫານຢູ່ກຳປູເຈຍ: ມຸມມອງຈາກການສຳຫຼວດພາກສະໜາມ',* Working Paper 24, ພະນົມເປັນ: CDRI

**ສະຫະພັນແມ່ຍິງລາວ ແລະ ແຫຼ່ງຂໍ້ມູນຂ່າວສານ ແລະ ການພັດທະນາກ່ຽວກັບບົດບາດຍິງຊາຍ (2005),** *Lao PDR: ຂໍ້ມູນກ່ຽວກັບບົດບາດຍິງຊາຍ,* ວຽງຈັນ.

# ເອກະສານອ້າງອີງ


**Ling Z ແລະ J Zhongyi (1995),** 'YigongDaizhen in China: ປະສົບການໃໝ່ໂດຍການເຮັດວຽກງານ ກໍ່ສ້າງທີ່ເນັ້ນແຮງງານຢູ່ເຂດທຸກຍາກ,' Chapter 4, ບົດທີ 4, ໃນບົດຂອງ J von Braun (E.d.), *ການຈ້າງງານ, ການຫຼຸດຜ່ອນຄວາມທຸກຍາກ ແລະ ການຄໍ້າປະກັນດ້ານສະບຽງອາຫານ,* ວໍຊິງຕັນ: IFPRI.

**Maclear Michael (1980),** *ຫວຽດນາມ: ສົງຄາມກ່ຽວກັບສິບພັນມື້ເຮັດວຽກ,* N.Y: Penguin.

**Mann Elizabeth ແລະ Florian Rock (2008),** *ເອກະສານຄົ້ນຄວ້າຂອງອົງການ GTZ ກ່ຽວກັບນະໂຍບາຍທີ່ດິນ ແລະ ທາງເລືອກໃນການໃຫ້ເຊົ່າ ຢູ່ ສປປ ລາວ,* ວຽງຈັນ.

**Martin P (2007),** *ການປະກອບສ່ວນທາງດ້ານເສດຖະກິດຂອງແຮງງານທີ່ໄປເຮັດວຽກຢູ່ໄທ: ກ້າວໄປສູ່ການພັດທະນານະໂຍບາຍ,* ຫ້ອງການປະຈໍາພາກພື້ນ ຂອງອົງການແຮງງານສາກົນ ຢູ່ອາຊີຕາເວັນອອກ (ILO SRO).

**ສະຖາບັນແມ່ຂອງ (MI) (2007),** *ການຈັດຕັ້ງປະຕິບັດ ແລະ ການຕິດຕາມກວດການະໂຍບາຍການເຄື່ອນຍ້າຍແຮງງານຂ້າມຊາຍແດນ: ປະສິດທິພົນຂອງນະໂຍບາຍ ແລະ ຊ່ອງຫວ່າງທາງດ້ານນະໂຍບາຍໃນປະຈຸບັນໃນຂົງເຂດລຸ່ມແມ່ນໍ້າຂອງ,* ເອກະສານກອງປະຊຸມສໍາມະນາດ້ານນະໂຍບາຍ (ກັນຍາ 15-17, 2007), ໜ້າ 34.

**ເຄືອຂ່າຍແຮງງານໄປເຮັດວຽກຢູ່ຕ່າງປະເທດ ໃນຂົງເຂດລຸ່ມແມ່ນໍ້າຂອງ/ສູນແຮງງານໄປເຮັດວຽກຢູ່ຕ່າງປະເທດ (2005),** *ບົດກ່າວອ້າງອີງ: ການເຄື່ອນຍ້າຍແຮງງານໃນເຂດລຸ່ມແມ່ນໍ້າຂອງ,* ຮອງກົງ: ສູນແຮງງານໄປເຮັດວຽກຢູ່ຕ່າງປະເທດອາຊີ.

**Mellor John (1976),** *ເສດຖະສາດໃໝ່ຂອງການພັດທະນາ,* Ithaca: Cornell University Press.

**Menon Jayant ແລະ Peter Warr (2007),** *ການປັບປຸງຖະໜົນຫົນທາງຊ່ວຍຫຼຸດຜ່ອນຄວາມທຸກຍາກບໍ່? ການວິໄຈໂດຍນໍາໃຊ້ຂໍ້ມູນການສໍາຫຼວດການໃຊ້ຈ່າຍ ແລະ ຊົມໃຊ້ຂອງຄົວເຮືອນ (LECS) ສໍາລັບ ສປປ ລາວ,* ວຽງຈັນ: CPI ແລະ World Bank.

**Messerli P, A Heinimann, M Epprecht, S Phonesaly, C Thiraka ແລະ N Minot,** *(eds.), 2008: ແຜນທີ່ເສດຖະກິດ-ສັງຄົມຂອງ ສປປ ລາວ: ການວິໄຈໂດຍອີງໃສ່ການສໍາຫຼວດພົນລະເມືອງ ແລະ ທີ່ຢູ່ອາໄສ ປີ 2005,* ສູນຄົ້ນຄວ້າສະວິສ (NCCR) ເໜືອ-ໃຕ້, ມະຫາວິທະຍາໄລເບີນ, ເບີນ ແລະ ວຽງຈັນ: Geographica Bernensia.

**MOE (ກະຊວງສຶກສາທິການ) (2008a),** *ທຶນມະນຸດ ແລະ ຊ່ອງຫວ່າງການພັດທະນາມະນຸດ ດ້ານການສຶກສາ ແລະ ທັກສະສີມືຕ່າງໆ ຢູ່ ສປປ ລາວ,* ເອກະສານຄົ້ນຄວ້າສະໜັບສະໜູນດ້ານເຕັກນິກ ສໍາລັບ NHDR4, ວຽງຈັນ.

**MOE (2008b),** *ກອບການພັດທະນາຂະແໜງການສຶກສາ 2009-2015 (ຮ່າງ),* ພະຈິກ, ວຽງຈັນ.

**MOE (2008c),** *ຍຸດທະສາດການປະຕິຮູບລະບົບການສຶກສາແຫ່ງຊາດ 2006-2015 (ຮ່າງ),* ເມສາ, ວຽງຈັນ.

**MOLSW (ກະຊວງແຮງງານ ແລະ ສະຫວັດດີການສັງຄົມ) (2008),** *ແຮງງານທັກສະສີມືຕໍ່າຢູ່ ສປປ ລາວ: ສະຖານະພາບ ແລະ ຜົນກະທົບຕໍ່ການພັດທະນາມະນຸດ,* ເອກະສານທາງດ້ານເຕັກນິກກະກຽມໃຫ້ແກ່ບົດລາຍງານການພັດທະນາມະນຸດແຫ່ງຊາດ ຄັ້ງທີ 4, ວຽງຈັນ.

# ເອກະສານອ້າງອີງ


**Moore Spencer, Mark Daniel ແລະ Yan Kestens, Sandro Galea ແລະ Jennifer Ahern (2007),** *'ຄວາມບໍ່ເທົ່າທຽມກັນທາງດ້ານການສຶກສາໄດ້ຮັບການປົກປ້ອງບໍ່?',* American Journal of Public Health, ສະບັບທີ 97, No 1.

**Moreno-Dodson B (ed) (2005),** *ການຫຼຸດຜ່ອນຄວາມທຸກຍາກໃນລະດັບໂລກ, ທຶນມາຈາກຂໍ້ລິເລີ່ມ ດ້ານການຮຽນຮູ້ຂອງຊຽງໃໝ່,* ວໍຊິງຕັນ: World Bank.

**Morris Elizabeth and Ole Bruun (2005),** *ສົ່ງເສີມໂອກາດການມີວຽກເຮັດງານທຳໃນເຂດຊົນນະບົດຂອງມົງໂກລີ,* ບາງກອກ: ILO.

**Mulryan-Kyne Catherine (2007),** 'ການກະກຽມຄູອາຈານສຳລັບການສຶກສາຫ້ອງຄວບ', *ການສອນ ແລະ ການອົບຮົມຄູ,* ສະບັບທີ 23, Issue 4, ໜ້າ 507-514.

**NERI (ສະຖາບັນຄົ້ນຄວ້າເສດຖະກິດແຫ່ງຊາດ) (2006),** *ທົບທວນຄືນຜົນກະທົບຂອງການເຊື່ອມໂຍງທາງ ດ້ານເສດຖະກິດຕໍ່ຄວາມທຸກຍາກຢູ່ ສປປ ລາວ (ຮ່າງສຸດທ້າຍ),* ວຽງຈັນ: ກະຊວງແຜນການ ແລະ ການລົງທຶນ.

**NERI (2007),** *ສະຖິຕິກ່ຽວກັບການເງິນຊົນນະບົດ ແລະ ການເງິນຈຸລະພາກ ຢູ່ ສປປ ລາວ 2006,* ວຽງຈັນ: ກະຊວງແຜນການ ແລະ ການລົງທຶນ.

**NERI (2008),** *ການເຄື່ອນຍ້າຍແຮງງານອອກຈາກ ສປປ ລາວໄປເຮັດວຽກຢູ່ຕ່າງປະເທດ: ປະເດັນບັນຫາໃນການເພີ່ມການພັດທະນາມະນຸດ,* ບົດຄົ້ນຄວ້າດ້ານເຕັກນິກກະກຽມໃຫ້ແກ່ບົດລາຍງານການພັດທະນາມະນຸດແຫ່ງຊາດ ເຫຼັ້ມທີ 4, ວຽງຈັນ.

**NERI and DOS (ກົມສະຖິຕິ) (2008),** *ຜົນກະທົບທາງດ້ານເສດຖະກິດຂອງການເຄື່ອນຍ້າຍແຮງງານໄປເຮັດວຽກຢູ່ຕ່າງປະເທດ: ກໍລະນີສຶກສາຢູ່ແຂວງໄຊຍະບູລີ ແລະ ຈຳປາສັກ,* ສະບັບຮ່າງເບື້ອງຕົ້ນ, ວຽງຈັນ.

**ງ່າວສີລິວັດທະນາ ເພີຍພັນ ແລະ ຄຳພັນ ແກ້ວມະນີວົງ (2007),** *ການຄົ້ນຄວ້າກ່ຽວກັບການສັງລວມທີ່ດິນຢູ່ ສປປ ລາວ,* ບົດຄົ້ນຄວ້າດ້ານນະໂຍບາຍທີ່ດິນ ເລກທີ 7 ພາຍໃຕ້ LLTP II,ວຽງຈັນ: ໂຄງການພັດທະນານະໂຍບາຍທີ່ດິນ ລາວ-ເຢຍລະມັນ (ການປະກອບສ່ວນຂອງເຢຍລະມັນເຂົ້າໃນໂຄງການອອກໃບຕາດິນຂອງລາວ ໄລຍະ II ຢູ່ ສປປ ລາວ).

**Oloth Sene-Asa (2006),** *ການຫັນປ່ຽນອາຊີບຂອງຊາວໜຸ່ມແມ່ຍິງທີ່ເຮັດວຽກຢູ່ໂຮງງານຕັດຫຍິບມາເປັນສາວຂາຍບໍລິການທາງເພດ,* ບົດວິທະຍານິພົນປະລິນຍາໂທ, ເຈເນວາ: Graduate Institute of Development Studies.

**Osmani Siddiqur R (2002),** *'ການຊອກຫາການເຊື່ອມໂຍງທາງດ້ານການສ້າງວຽກເຮັດງານທຳ: ຫົວຂໍ້ກ່ຽວກັບການສ້າງວຽກເຮັດງານທຳ ແລະ ຄວາມທຸກຍາກ',* ILO/UNDP (Belfast: University of Ulster).

**Osmani Siddiqur R (2004),** *'ການເຊື່ອມໂຍງທາງດ້ານການສ້າງວຽກເຮັດງານທຳ ລະຫວ່າງການເຕີບໂຕ ແລະ ຄວາມທຸກຍາກ',* Sida/UNDP (Belfast: University of Ulster).

**Papanek Gustav F (1980) (ed),** *ເສດຖະກິດຂອງອິນໂດເນເຊຍ,* New York: Praeger.

**Papanek Gustav F (2005),** *'ແຜນງານການສ້າງວຽກເຮັດງານທຳດ້ານດີ' (Mimeo),* Boston: Boston Institute of Development Economics.

# ເອກະສານອ້າງອີງ


**Papola T. S. (1986),** *ຂະແໜງນອກລະບົບໃນຕົວເມືອງໃນເສດຖະກິດຂອງປະເທດກຳລັງພັດທະນາ,* ນິວເດລີ: Vikas Publishing House.

**Peason Elaine, Sureeporn Punpuing, Aree Jampaklay, Sirinan Kittisuksathit ແລະ Aree Prohmmo (2006),** *ສິ່ງທ້າທາຍຂອງເຂດລຸ່ມແມ່ນ້ຳຂອງ: ການຈ່າຍຄ່າຈ້າງຕ່ຳກວ່າມາດຕະຖານ, ເຮັດວຽກເກີນເວລາ ແລະ ການເບິ່ງຂ້າມຄວາມເປັນຈິງຂອງແຮງງານຊາວໜຸ່ມທີ່ໄປເຮັດວຽກຢູ່ໄທ,* ວຽງຈັນ: ILO/IPEC.

**Phetsiriseng I. (2003),** *'ສປປ ລາວ: ການປະເມີນຜົນເບື້ອງຕົ້ນຂອງແຮງງານທີ່ໄປເຮັດວຽກຢູ່ຕ່າງປະເທດແບບຜິດກົດໝາຍ ແລະ ການລັກລອບຄ້າຂາຍແມ່ຍິງ ແລະ ເດັກນ້ອຍເພື່ອຂູດຮີດແຮງງານ',* Vientiane: ILO/IPEC.

**ວັດທະນາ ພົນເສນາ ແລະ ຣຸດບາໂນເມືອງ (2006),** *ລາວ: ຈາກບ່ອນຮອງຮັບໄປສູ່ທາງຄັບ?,* ຊຽງໃໝ່: Mekong Press

**Polanyi Karl (1943),** *ການປະຕິຮູບຄັ້ງໃຫຍ່,* New York: Rinehart & Company, Inc.

**Porter Michael E (1998),** *ຄວາມໄດ້ປຽບທາງດ້ານການແຂ່ງຂັນຂອງປະເທດ,* New York: Free Press.

**Psachropolous George (1994),** 'ການກັບຄືນມາຂອງການລົງທຶນໃສ່ການສຶກສາ: ຂໍ້ມູນຫຼ້າສຸດລະດັບໂລກ', *ການພັດທະນາໂລກ,* ສະບັບທີ 22, ເລກທີ 9, ໜ້າ 1325-43.

**Quist Dawn (2005),** *ອຸປະກອນການສອນຫ້ອງຄວບ,* London: Commonwealth Secretariat.

**Raj Krishna (1976),** *ການຫວ່າງງານ: ການສຳຫຼວດກ່ຽວກັບແນວຄວາມຄິດ ແລະ ນິຍາມ,* World Bank Staff Working Paper, Number 234, ວໍຊິງຕັນ.

**Rastyannikov VG (1982),** *ວິວັດທະນາການທາງດ້ານກະສິກຳໃນສັງຄົມທີ່ມີຫຼາຍໂຄງສ້າງຢູ່ຮ່ວມກັນ,* Cambridge: Cambridge University Press.

**Richter Kasar, Roy van der Weide ແລະ Phonesaly Souksavath (2005),** *ທ່າອ່ຽງຄວາມທຸກຍາກຂອງ ສປປ ລາວ 1992/3-2002/03,* ວຽງຈັນ: ສູນສະຖິຕິແຫ່ງຊາດ/ທະນາຄານໂລກ.

**Schultz Theodore W (1963),** *'ມູນຄ່າທາງດ້ານເສດຖະກິດຂອງການສຶກສາ'* , New York: Columbia University Press.

**Schumann Gunda, ເພີຍພັນ ງ່າວສີລິວັດທະນາ, ບົວຄຳ ສຸລິວັນ, ສົມບູນ ເຄນປະເສີດ, ຄຳແດງ ອ່ອນມະ ນີວົງ, ຄຳທັນ ວົງປະສີປະເສີດ ແລະ ຈິດປະສອນ ບຸນໂຊງ (2006),** *ການສຶກສາກ່ຽວກັບການໃຫ້ເຊົ່າ ແລະ ການໃຫ້ສຳປະທານທີ່ດິນລັດ, ການສຶກສາກ່ຽວກັບນະໂຍບາຍທີ່ດິນ ເລກທີ 4 ພາຍໃຕ້ LLTP II,* ວຽງຈັນ: ໂຄງການພັດທະນານະໂຍບາຍທີ່ດິນ ລາວ-ເຢຍລະມັນ.

**Seidel Katrin, ຄຳຫຼ້າ ພາວິໄລ, ບຸນລັດ ວໍລະຈິດ, ລາວ ມົວ, ສົມທອງ ບຸບພະຈັນ ແລະ Robert B Oberndorf (2007),** *ການສຶກສາກ່ຽວກັບການຂຶ້ນທະບຽນທີ່ດິນລວມ ຢູ່ ສປປ ລາວ, ການສຶກສາກ່ຽວກັບນະໂຍບາຍທີ່ດິນ ເລກທີ 6 ພາຍໃຕ້ LLTP II,* ວຽງຈັນ: ໂຄງການພັດທະນານະໂຍບາຍທີ່ດິນ ລາວ-ເຢຍລະມັນ (ການປະກອບສ່ວນຂອງເຢຍລະມັນເຂົ້າໃນໂຄງການອອກໃບຕາດິນຂອງລາວ ໄລຍະ II ຢູ່ ສປປ ລາວ).

# ເອກະສານອ້າງອີງ


**Sen Amartya (1975),** *'ວຽກເຮັດງານທຳ, ເຕັກໂນໂລຊີ ແລະ ການພັດທະນາ',* ILO ເຈເນວາ/ອອກສຟອດ: Clarendon.

**Singh Inderjit (1988),** *'ທີ່ດິນ ແລະ ແຮງງານໃນອາຊີໃຕ້',* World Bank (Mimeo), ວໍຊິງຕັນ.

**ສຸລິວັນ ບົວຄຳ, ອະໂນໄທ ຈັນທະລາສີ, ພູສະຫວັນ ສຸພິດາ, Florian Lintzmeyer ແລະ Florian Rock (2004),** *ການສຶກສາກ່ຽວກັບການຈັດສັນທີ່ດິນໃຫ້ແກ່ຄົວເຮືອນໃນເຂດຊົນນະບົດຂອງ ສປປ ລາວ,* ວຽງຈັນ.

**ສຸລິວັນ ບົວຄຳ, ອະໂນໄທ ຈັນທະລາສີ, ພູສະຫວັນ ສຸພິດາ, Phounsavant Suphida, Florian Lintzmeyer ແລະ Florian Rock (2005),** *ການສຶກສາກ່ຽວກັບຕະຫຼາດທີ່ດິນໃນເຂດຕົວເມືອງ ແລະ ຊົນນະບົດຂອງ ສປປ ລາວ,* ວຽງຈັນ.

**Srinivasan TN and Pranab K Bardhan (1988),** *ຄວາມທຸກຍາກຊົນນະບົດຢູ່ອາຊີໃຕ້,* N.Y: Columbia University Press.

**Stuart-Fox Martin (2007),** 'ລາວ' ໃນບົດ (ບາງພາກ) *'ປະເທດຕ່າງໆໃນທາງຄັບ'* (publisher unknown).

**Thomas Vinod, Yan Wang ແລະ Xibo Fan (2005),** *ຄວາມບໍ່ເທົ່າທຽມກັນທາງດ້ານການສຶກສາ: ໂຄງປະກອບ ແລະ ວິທີການຄົ້ນຄວ້າ, ການສະເໜີບົດ,* TOT ກ່ຽວກັບການວິໄຈຄວາມທຸກຍາກ, Beijing, Nov. 18, 2005.

**Thongyou M ແລະ D Ayuwat (2005),** *ເຄືອຂ່າຍທາງດ້ານສັງຄົມຂອງແຮງງານລາວທີ່ເຮັດວຽກຢູ່ໄທ,* Working Paper Series ເລກທີ 80, ສູນການຄົ້ນຄວ້າອາຊີຕາເວັນອອກສຽງໃຕ້, City University of Hong Kong, ຮອງກົງ: SEARC.

**UNDP (2007a),** *ບົດລາຍງານການພັດທະນາມະນຸດປີ 2007/2008,* ນິວຢອກ: Palgrave Macmillan.

**UNIFEM (ກອງທຶນພັດທະນາຂອງສະຫະປະຊາຊາດເພື່ອແມ່ຍິງ) ແລະ ILO (2006),** *'ບົດຂ່າວອອກມາໃໝ່: ການສຳຫຼວດຄວາມຄິດເຫັນໃໝ່ໄດ້ເນັ້ນໜັກເຖິງຄວາມຈຳເປັນທີ່ຄົນໄທຕ້ອງໄດ້ທຳຄວາມເຂົ້າໃຈໃຫ້ດີຂຶ້ນກ່ຽວກັບຄວາມສຳຄັນຂອງແຮງງານຕ່າງດ້າວຕໍ່ເສດຖະກິດຂອງເຂົາເຈົ້າ',* Bangkok.

**Visaria Pravin (1981),** 'ຄວາມທຸກຍາກ ແລະ ການຫວ່າງງານຢູ່ອິນເດຍ: ການວິໄຈສະພາບປະຈຸບັນ', *World Development,* ສະບັບທີ 9, Issue 3, ໜ້າ 277-300.

**Weeks John (1975),** 'ນະໂຍບາຍໃນການຂະຫຍາຍວຽກເຮັດງານທຳນອກລະບົບຢູ່ເຂດຕົວເມືອງຂອງປະເທດກຳລັງພັດທະນາ', *International Labour Review,* ສະບັບທີ 111, Issue 1, ໜ້າ 113.

**WFP (2007),** *ການວິໄຈກ່ຽວກັບຄວາມສ່ຽງ ແລະ ການຮັບປະກັນທາງດ້ານສະບຽງອາຫານຮອບດ້ານ,* ວຽງຈັນ (ໃນຮູບແບບ CD).

**ທະນາຄານໂລກ (1990),** *ບົດລາຍງານການພັດທະນາໂລກ,* ວໍຊິງຕັນ: ທະນາຄານໂລກ.

**ທະນາຄານໂລກ (1993),** *ບົດລາຍງານການພັດທະນາໂລກ,* ວໍຊິງຕັນ: ທະນາຄານໂລກ.

**ທະນາຄານໂລກ (1995),** *ບົດລາຍງານການພັດທະນາໂລກ,* ວໍຊິງຕັນ: ທະນາຄານໂລກ.

# ເອກະສານອ້າງອີງ

**ທະນາຄານໂລກ (2001),** *ຍຸດທະສາດການພັດທະນາຂະແໜງການເອກະຊົນ-ທິດທາງຂອງກຸ່ມທະນາຄານໂລກ,* http://rru.worldbank.org/strategy/documents/PSDStrategy-Dec3version.pdf

**ທະນາຄານໂລກ (2004),** *ການເຮັດໃຫ້ທ່າແຮງບົ່ມຊ້ອນຂອງ ສປປ ລາວ ປະກົດຜົນເປັນຈິງ – ບົດບັນທຶກທາງດ້ານເສດຖະກິດຂອງ ປະເທດ ສປປ ລາວ,* ວຽງຈັນ.

**ທະນາຄານໂລກ (2005),** *ສປປ ລາວ: ຄວາມທຸກຍາກຢູ່ຊົນນະບົດ – ທ່າອ່ຽງ ແລະ ສະພາບການ,* ວຽງຈັນ.

**ທະນາຄານໂລກ (2006),** *ການເຄື່ອນຍ້າຍແຮງງານໃນເຂດລຸ່ມແມ່ນ້ຳຂອງ, ບົດລາຍງານສັງລວມ: ໄລຍະທີ I,* ມິຖຸນາ 2006.

**ທະນາຄານໂລກ (2007),** *ສປປ ລາວ: ທົບທວນລາຍຈ່າຍພາກລັດ, ການປະເມີນຄວາມເຊື່ອໝັ້ນແບບລວມສູນ,* http://www.wwds.worldbank.org/external/default/WDSContentServer/WDSP/IB/2007/06/27/000020439_2007062709 4302/Rendered/PDF/397910LA.pdf

**ທະນາຄານໂລກ (2008),** *ຕິດຕາມສະພາບເສດຖະກິດໃນ ສປປ ລາວ, ເມສາ,* ວຽງຈັນ: ທະນາຄານໂລກ.

# ເອກະສານຊ້ອນທ້າຍ I:

## ຂໍ້ມູນພື້ນຖານຂອງ ສປປ ລາວ ຕົວຊີ້ບອກດ້ານການພັດທະນາມະນຸດ


ຕາຕະລາງ 1: ຂໍ້ມູນພື້ນຖານຂອງ ສປປ ລາວ 220
ຕາຕະລາງ 2: ຕົວຊີ້ບອກດ້ານການພັດທະນາມະນຸດ 221
ຕາຕະລາງ 3: ຂໍ້ມູນຄວາມທຸກຍາກ ແລະ ຕົວຊີ້ບອກທີ່ກ່ຽວຂ້ອງ 222
ຕາຕະລາງ 4: ຂໍ້ມູນດ້ານປະຊາກອນ 225
ຕາຕະລາງ 5: ການແຈກຢາຍຂອງປະຊາກອນແບ່ງຕາມເພດ ແລະ ແຂວງ 227
ຕາຕະລາງ 6: ການວັດແທກອັດຕາການຕາຍ 228
ຕາຕະລາງ 7: ຂໍ້ມູນດ້ານສຸຂະພາບ 230



## ຕາຕະລາງ 1: ຂໍ້ມູນພື້ນຖານຂອງ ສປປ ລາວ

| | ເນື້ອທີ່ລວມ | ເມືອງ | ບ້ານ | ຄົວເຮືອນ | ຄົວເຮືອນ | ຈຳນວນແຮງງານ ສະເລ່ຍຕໍ່ຄົວເຮືອນ |
|---|---|---|---|---|---|---|
| | ກມ$^2$ | ຈຳນວນ | ຈຳນວນ | ຈຳນວນ | ຈຳນວນ | ຄົນ |
| | 2007 | 2007 | 2007 | 2007 | 2008 | 2005 |
| | 1 | 2 | 3 | 4 | 5 | 6 |
| ສປປ ລາວ | 236,800 .0 | 139.0 | 9,113.0 | 982,485.0 | 1,011,623.0 | 2.9 |
| ຕົວເມືອງ | … | … | … | … | … | 2.5 |
| ຊົນນະບົດມີເສັ້ນທາງເຂົ້າເຖິງ | … | … | … | … | … | 2.9 |
| ຊົນນະບົດບໍ່ມີເສັ້ນທາງເຂົ້າເຖິງ | … | … | … | … | … | 3.1 |
| ແຂວງ | | | | | | |
| ນະຄອນຫຼວງວຽງຈັນ | 3,920.0 | 9.0 | 500.0 | 124,872.0 | 128,464.0 | 2.6 |
| ຜົ້ງສາລີ | 16,270.0 | 7.0 | 563.0 | 28,802.0 | 28,453.0 | 2.9 |
| ຫຼວງນ້ຳທາ | 9,325.0 | 5.0 | 362.0 | 28,145.0 | 28,831.0 | 2.7 |
| ອຸດົມໄຊ | 15,370.0 | 7.0 | 502.0 | 43,618.0 | 44,923.0 | 2.9 |
| ບໍ່ແກ້ວ | 6,196.0 | 5.0 | 312.0 | 27,223.0 | 27,520.0 | 2.7 |
| ຫຼວງພະບາງ | 16,875.0 | 11.0 | 821.0 | 69,265.0 | 71,090.0 | 2.8 |
| ຫົວພັນ | 16,500.0 | 8.0 | 774.0 | 43,964.0 | 44,664.0 | 2.9 |
| ໄຊຍະບູລີ | 16,389.0 | 10.0 | 465.0 | 63,682.0 | 66,575.0 | 2.9 |
| ຊຽງຂວາງ | 16,358.0 | 8.0 | 567.0 | 39,418.0 | 39,056.0 | 2.7 |
| ວຽງຈັນ | 22,554.0 | 12.0 | 528.0 | 77,069.0 | 82,910.0 | 2.7 |
| ບໍລິຄຳໄຊ | 14,863.0 | 6.0 | 326.0 | 39,827.0 | 41,127.0 | 2.7 |
| ຄຳມ່ວນ | 16,315.0 | 9.0 | 658.0 | 62,597.0 | 66,297.0 | 2.7 |
| ສະຫວັນນະເຂດ | 21,774.0 | 15.0 | 1,012.0 | 134,646.0 | 139,191.0 | 3.3 |
| ສາລະວັນ | 10,691.0 | 8.0 | 682.0 | 58,047.0 | 56,815.0 | 3.2 |
| ເຊກອງ | 7,665.0 | 4.0 | 252.0 | 13,772.0 | 15,200.0 | 3.2 |
| ຈຳປາສັກ | 15,415.0 | 10.0 | 645.0 | 107,091.0 | 108,568.0 | 2.9 |
| ອັດຕະປື | 10,320.0 | 5.0 | 174.0 | 20,447.0 | 21,939.0 | 2.8 |

***ແຫຼ່ງຂໍ້ມູນ:***
***ຖັນທີ 1-3:*** *ຜທ, ສຖຕ(2007), ວາລະສານສະຖິຕິປະຈຳປີ*
***ຖັນທີ 4:*** *ຜທ, ສຖຕ(2009), ການສຳຫຼວດການຊົມໃຊ້ ແລະ ໃຊ້ຈ່າຍຂອງຄົວເຮືອນ, 2007/2008*
***ຖັນທີ 5:*** *ຜທ, ສຖຕ (2008) ວາລະສານສະຖິຕິປະຈຳປີ*
***ຖັນທີ 6:*** *ຜທ, ສຖຕ (2005), ສຳຫຼວດພົນລະເມືອງ ປີ 2005*

***ໝາຍເຫດ:***
*… : ບໍ່ມີຂໍ້ມູນ*

## ຕາຕະລາງ 2: ຕົວຊີ້ບອກດ້ານການພັດທະນາມະນຸດ

| | ດັດຊະນີການພັດທະນາມະນຸດ (HDI) | |
|---|---|---|
| | ຄ່າໃນປີ 1995 | ຄ່າໃນປີ 2005 |
| ສປປ ລາວ | ... | ... |
| ແຂວງ | | |
| ນະຄອນຫຼວງວຽງຈັນ | 0.519 | 0.687 |
| ຜົ້ງສາລີ | 0.175 | 0.279 |
| ຫຼວງນໍ້າທາ | 0.153 | 0.316 |
| ອຸດົມໄຊ | 0.199 | 0.314 |
| ບໍ່ແກ້ວ | 0.197 | 0.368 |
| ຫຼວງພະບາງ | 0.226 | 0.414 |
| ຫົວພັນ | 0.215 | 0.386 |
| ໄຊຍະບູລີ | 0.310 | 0.492 |
| ຊຽງຂວາງ | 0.281 | 0.434 |
| ວຽງຈັນ | 0.359 | 0.520 |
| ບໍລິຄໍາໄຊ | 0.286 | 0.459 |
| ຄໍາມ່ວນ | 0.291 | 0.366 |
| ສະຫວັນນະເຂດ | 0.291 | 0.404 |
| ສາລະວັນ | 0.248 | 0.308 |
| ເຊກອງ | 0.196 | 0.307 |
| ຈໍາປາສັກ | 0.325 | 0.467 |
| ອັດຕະປື | 0.235 | 0.331 |

***ແຫຼ່ງຂໍ້ມູນ:*** *ການຄິດໄລ່ອີງໃສ່ຂໍ້ມູນຈາກກົມສະຖິຕິ*

## ຕາຕະລາງ 3: ຂໍ້ມູນຄວາມທຸກຍາກ ແລະ ຕົວຊີ້ບອກທີ່ກ່ຽວຂ້ອງ

| | ອັດຕາສ່ວນຄວາມທຸກຍາກ | | | | ອັດຕາຄວາມແຕກຕ່າງຂອງຄວາມທຸກຍາກ | | | |
|---|---|---|---|---|---|---|---|---|
| | ສ່ວນຮ້ອຍ | ສ່ວນຮ້ອຍ | ສ່ວນຮ້ອຍ | ສ່ວນຮ້ອຍ | ສ່ວນຮ້ອຍ | ສ່ວນຮ້ອຍ | ສ່ວນຮ້ອຍ | ສ່ວນຮ້ອຍ |
| | 1992-93 | 1997-98 | 2002-03 | 2007-08 | 1992/93 | 1997/98 | 2002/03 | 2007-08 |
| | 1 | 2 | 3 | 4 | 5 | 6 | 7 | 8 |
| ສປປ ລາວ | 46.0 | 39.0 | 34.0 | 27.6 | 11.2 | 10.3 | 8.0 | 6.5 |
| ຕົວເມືອງ | 27.0 | 22.0 | 20.0 | 17.4 | 5.5 | 4.9 | 4.1 | 3.4 |
| ຊົນນະບົດ | 52.0 | 43.0 | 38.0 | 31.7 | 12.9 | 11.4 | 9.2 | 7.7 |
| ແຂວງ | | | | | | | | |
| ນະຄອນຫຼວງວຽງຈັນ | 34.0 | 14.0 | 17.0 | 15.2 | 7.0 | 2.8 | 3.6 | 3.4 |
| ຜົ້ງສາລີ | 72.0 | 58.0 | 51.0 | 46.0 | 16.3 | 17.0 | 12.7 | 11.8 |
| ຫຼວງນ້ຳທາ | 41.0 | 51.0 | 23.0 | 30.5 | 10.3 | 14.4 | 4.7 | 6.1 |
| ອຸດົມໄຊ | 46.0 | 66.0 | 45.0 | 33.7 | 9.7 | 24.7 | 11.3 | 8.6 |
| ບໍ່ແກ້ວ | 42.0 | 39.0 | 21.0 | 32.6 | 7.0 | 9.5 | 5.4 | 7.9 |
| ຫຼວງພະບາງ | 59.0 | 41.0 | 40.0 | 27.2 | 15.5 | 9.8 | 20.9 | 5.5 |
| ຫົວພັນ | 71.0 | 71.0 | 52.0 | 50.5 | 24.6 | 23.4 | 14.9 | 13.6 |
| ໄຊຍະບູລີ | 22.0 | 18.0 | 25.0 | 15.7 | 4.8 | 3.1 | 6.2 | 3.0 |
| ຊຽງຂວາງ | 63.0 | 43.0 | 42.0 | 42.0 | 18.0 | 11.9 | 12.5 | 13.4 |
| ວຽງຈັນ | 31.0 | 28.0 | 19.0 | 28.0 | 6.5 | 5.7 | 3.6 | 6.2 |
| ບໍລິຄຳໄຊ | 17.0 | 28.0 | 29.0 | 21.5 | 2.3 | 7.4 | 6.2 | 4.3 |
| ຄຳມ່ວນ | 47.0 | 45.0 | 34.0 | 31.4 | 11.5 | 11.3 | 8.2 | 6.7 |
| ສະຫວັນນະເຂດ | 53.0 | 42.0 | 43.0 | 28.5 | 11.2 | 9.8 | 11.4 | 6.1 |
| ສາລະວັນ | 44.0 | 39.0 | 54.0 | 36.3 | 8.7 | 10.0 | 13.8 | 9.1 |
| ເຊກອງ | 67.0 | 50.0 | 42.0 | 51.8 | 23.5 | 15.0 | 12.3 | 19.1 |
| ຈຳປາສັກ | 41.0 | 37.0 | 18.0 | 10.0 | 10.2 | 9.0 | 3.8 | 1.6 |
| ອັດຕະປື | 61.0 | 48.0 | 44.0 | 24.6 | 22.4 | 12.1 | 12.2 | 4.6 |
| ເຂດພິເສດໄຊສົມບູນ | ... | 63.0 | 31.0 | ... | ... | 9.8 | 7.1 | ... |

***ແຫຼ່ງຂໍ້ມູນ:***
***ຖັນທີ 1-8:*** *ຜທ, ສຖຕ(2009), "ບົດລາຍງານຄວາມທຸກຍາກໃນ ສປປ ລາວ,1992-2008"*
***ຖັນທີ 9-18:*** *ຜທ, ສຖຕ (2009), ສຳຫຼວດການຊົມໃຊ້ ແລະ ການໃຊ້ຈ່າຍຂອງຄົວເຮືອນ (LECS) ປີ 2002-03 ແລະ 2007-08*

***ໝາຍເຫດ:***
*... : ບໍ່ມີຂໍ້ມູນ*

## ຕາຕະລາງ 3: ຂໍ້ມູນຄວາມທຸກຍາກ ແລະ ຕົວຊີ້ບອກທີ່ກ່ຽວຂ້ອງ

| | ການບໍລິໂພກສະເລ່ຍ ຕໍ່ເດືອນຕໍ່ຄົວເຮືອນ | | ສັດສ່ວນຂອງການບໍລິໂພກທັງໝົດ | | | |
|---|---|---|---|---|---|---|
| | | | ອາຫານ | | ຜະລິດຕະພັນທີ່ຜະລິດເອງ | |
| | ກີບຕໍ່ຄົວເຮືອນ | ກີບຕໍ່ຄົວເຮືອນ | ສ່ວນຮ້ອຍ | ສ່ວນຮ້ອຍ | ສ່ວນຮ້ອຍ | ສ່ວນຮ້ອຍ |
| | 2002/03 | 2007/08 | 2002/03 | 2007/08 | 2002/03 | 2007/08 |
| | 9 | 10 | 11 | 12 | 13 | 14 |
| ສປປ ລາວ | 1,091.0 | 2,170.7 | 55.0 | 30.0 | 29.0 | 23.0 |
| ຕົວເມືອງ | 1,707.0 | 2,950.2 | 45.0 | 33.0 | 9.0 | 9.0 |
| ຊົນນະບົດ | 855.0 | 1,826.1 | 63.0 | 26.0 | 44.0 | 34.0 |
| ແຂວງ | | | | | | |
| ນະຄອນຫຼວງວຽງຈັນ | 1,900.0 | 3,183.1 | 42.0 | 33.0 | 6.0 | 5.0 |
| ຜົ້ງສາລີ | 763.0 | 1,258.6 | 69.0 | 29.0 | 57.0 | 51.0 |
| ຫຼວງນ້ຳທາ | 1,029.0 | 1,654.6 | 58.0 | 26.0 | 41.0 | 34.0 |
| ອຸດົມໄຊ | 804.0 | 1,734.9 | 65.0 | 24.0 | 49.0 | 38.0 |
| ບໍ່ແກ້ວ | 833.0 | 1,279.0 | 67.0 | 31.0 | 50.0 | 42.0 |
| ຫຼວງພະບາງ | 1,118.0 | 2,177.6 | 52.0 | 29.0 | 25.0 | 22.0 |
| ຫົວພັນ | 939.0 | 1,471.5 | 65.0 | 22.0 | 50.0 | 49.0 |
| ໄຊຍະບູລີ | 1,102.0 | 3,035.4 | 50.0 | 19.0 | 33.0 | 19.0 |
| ຊຽງຂວາງ | 1,062.0 | 2,191.0 | 60.0 | 25.0 | 42.0 | 30.0 |
| ວຽງຈັນ | 1,212.0 | 1,857.5 | 50.0 | 32.0 | 23.0 | 27.0 |
| ບໍລິຄຳໄຊ | 963.0 | 2,019.1 | 62.0 | 34.0 | 37.0 | 26.0 |
| ຄຳມ່ວນ | 873.0 | 1,871.8 | 64.0 | 31.0 | 43.0 | 33.0 |
| ສະຫວັນນະເຂດ | 965.0 | 2,365.0 | 60.0 | 31.0 | 34.0 | 23.0 |
| ສາລະວັນ | 684.0 | 1,455.9 | 66.0 | 31.0 | 48.0 | 43.0 |
| ເຊກອງ | 804.0 | 1,518.7 | 68.0 | 37.0 | 47.0 | 35.0 |
| ຈຳປາສັກ | 1,054.0 | 2,299.5 | 58.0 | 31.0 | 23.0 | 20.0 |
| ອັດຕະປື | 838.0 | 1,759.7 | 57.0 | 33.0 | 38.0 | 30.0 |
| ເຂດພິເສດໄຊສົມບູນ | 899.0 | ... | 65.0 | ... | 39.0 | ... |

***ແຫຼ່ງຂໍ້ມູນ:***
***ຖັນທີ 1-8:*** *ຜທ, ສຖຕ(2009), "ບົດລາຍງານຄວາມທຸກຍາກໃນ ສປປ ລາວ,1992-2008"*
***ຖັນທີ 9-18:*** *ຜທ, ສຖຕ (2009), ສຳຫຼວດການຊົມໃຊ້ ແລະ ການໃຊ້ຈ່າຍຂອງຄົວເຮືອນ (LECS) ປີ 2002-03 ແລະ 2007-08*

***ໝາຍເຫດ:***
*... : ບໍ່ມີຂໍ້ມູນ*

## ຕາຕະລາງ 3: ຂໍ້ມູນຄວາມທຸກຍາກ ແລະ ຕົວຊີ້ບອກທີ່ກ່ຽວຂ້ອງ

| | ການບໍລິໂພກເຂົ້າໃນແຕ່ລະວັນຕໍ່ຫົວຄົນ | | | | | | | |
|---|---|---|---|---|---|---|---|---|
| | ຈຳນວນທັງໝົດ | | ເຂດຕົວເມືອງ | | ຊົນນະບົດມີເສັ້ນທາງເຂົ້າເຖິງ | | ຊົນນະບົດບໍ່ມີເສັ້ນທາງເຂົ້າເຖິງ | |
| | ກຣາມ | ກຣາມ | ກຣາມ | ກຣາມ | ກຣາມ | ກຣາມ | ກຣາມ | ກຣາມ |
| | 2002/03 | 2007/08 | 2002/03 | 2007/08 | 2002/03 | 2007/08 | 2002/03 | 2007/08 |
| | 15 | 16 | 17 | 18 | 19 | 20 | 21 | 22 |
| ສປປ ລາວ | 575.0 | 569 | 509 | 533 | 595 | 606 | 591 | 655 |
| ຕົວເມືອງ | 509.0 | 498 | … | … | … | … | … | … |
| ຊົນນະບົດ | 594.0 | 598 | … | … | … | … | … | … |
| ແຂວງ | | | | | | | | |
| ນະຄອນຫຼວງວຽງຈັນ | 478.0 | 400.0 | 442.0 | 418.0 | 589.0 | 473.0 | … | … |
| ຜົ້ງສາລີ | 592.0 | 707.0 | 541.0 | 581.0 | 629.0 | 695.0 | 585.0 | 760.0 |
| ຫຼວງນ້ຳທາ | 702.0 | 688.0 | 785.0 | 701.0 | 735.0 | 667.0 | 594.0 | 843.0 |
| ອຸດົມໄຊ | 644.0 | 645.0 | 545.0 | 670.0 | 658.0 | 657.0 | 666.0 | 661.0 |
| ບໍ່ແກ້ວ | 637.0 | 736.0 | 684.0 | 780.0 | 643.0 | 747.0 | 521.0 | 796.0 |
| ຫຼວງພະບາງ | 608.0 | 612.0 | 476.0 | 567.0 | 601.0 | 629.0 | 662.0 | 673.0 |
| ຫົວພັນ | 649.0 | 674.0 | 689.0 | 678.0 | 634.0 | 681.0 | 654.0 | 675.0 |
| ໄຊຍະບູລີ | 704.0 | 669.0 | 544.0 | 703.0 | 759.0 | 710.0 | 645.0 | 568.0 |
| ຊຽງຂວາງ | 672.0 | 661.0 | 676.0 | 671.0 | 712.0 | 672.0 | 637.0 | 652.0 |
| ວຽງຈັນ | 573.0 | 438.0 | 584.0 | 467.0 | 569.0 | 451.0 | 599.0 | … |
| ບໍລິຄຳໄຊ | 532.0 | 425.0 | 521.0 | 445.0 | 542.0 | 446.0 | 535.0 | 427.0 |
| ຄຳມ່ວນ | 717.0 | 566.0 | 646.0 | 534.0 | 733.0 | 592.0 | 714.0 | 769.0 |
| ສະຫວັນນະເຂດ | 452.0 | 575.0 | 475.0 | 547.0 | 455v | 652.0 | 415.0 | 676.0 |
| ສາລະວັນ | 597.0 | 611.0 | 600.0 | 480.0 | 597.0 | 630.0 | 596.0 | 451.0 |
| ເຊກອງ | 533.0 | 509.0 | 563.0 | 477.0 | 545.0 | 518.0 | 495.0 | 487.0 |
| ຈຳປາສັກ | 502.0 | 565.0 | 433.0 | 579.0 | 514.0 | 598.0 | 513.0 | 584.0 |
| ອັດຕະປື | 573.0 | 520.0 | 637.0 | 542.0 | 571.0 | 542.0 | 551.0 | 532.0 |
| ເຂດພິເສດໄຊສົມບູນ | 740.0 | … | 519.0 | … | 762.0 | … | … | … |

***ແຫຼ່ງຂໍ້ມູນ:***
***ຖັນທີ 1-8:*** *ຜທ, ສຖຕ(2009), "ບົດລາຍງານຄວາມທຸກຍາກໃນ ສປປ ລາວ,1992-2008"*
***ຖັນທີ 9-18:*** *ຜທ, ສຖຕ (2009), ສຳຫຼວດການຊົມໃຊ້ ແລະ ການໃຊ້ຈ່າຍຂອງຄົວເຮືອນ (LECS) ປີ 2002-03 ແລະ 2007-08*

***ໝາຍເຫດ:***
*... : ບໍ່ມີຂໍ້ມູນ*

## ຕາຕະລາງ 4: ຂໍ້ມູນດ້ານປະຊາກອນ

| | ຈຳນວນປະຊາກອນທັງໝົດ | | | | ອັດຕາການເພີ່ມຂອງປະຊາກອນ | ຄວາມໜາແໜ້ນຂອງປະຊາກອນ | | | ອັດຕາການເກີດທັງໝົດ | |
|---|---|---|---|---|---|---|---|---|---|---|
| | ພັນຄົນ | | | | ສ່ວນຮ້ອຍ | ຄົນ/ກມ$^2$ | | | ສ່ວນຮ້ອຍ | |
| | 1995 | 2005 | 2006 | 2007 | 2007/08 | 2005 | 2006 | 2007 | 1995 | 2005 |
| | 1 | 2 | 3 | 4 | 5 | 6 | 7 | 8 | 9 | 10 |
| ສປປ ລາວ | 4,575.0 | 5,622.0 | 5,748.0 | 5,874.0 | 2.1 | 23.7 | 24.3 | 25 | 5.4 | 4.5 |
| ແຂວງ | | | | | | | | | | |
| ນະຄອນຫຼວງວຽງຈັນ | 524.0 | 698.0 | 712.0 | 726.0 | 2.9 | 178.0 | 182.0 | 185.0 | 4.7 | 2.3 |
| ຜົ້ງສາລີ | 153.0 | 166.0 | 168.0 | 170.0 | 0.8 | 10.0 | 10.0 | 10.0 | 5.7 | 5.1 |
| ຫຼວງນ້ຳທາ | 115.0 | 145.0 | 149.0 | 153.0 | 2.4 | 16.0 | 16.0 | 16.0 | 5.7 | 4.8 |
| ອຸດົມໄຊ | 210.0 | 265.0 | 272.0 | 279.0 | 2.4 | 17.0 | 18.0 | 18.0 | 6.6 | 5.8 |
| ບໍ່ແກ້ວ | 114.0 | 145.0 | 149.0 | 153.0 | 2.5 | 23.0 | 24.0 | 25.0 | 5.5 | 4.7 |
| ຫຼວງພະບາງ | 365.0 | 407.0 | 415.0 | 423.0 | 1.1 | 24.0 | 25.0 | 25.0 | 6.1 | 5.3 |
| ຫົວພັນ | 245.0 | 281.0 | 288.0 | 295.0 | 1.4 | 17.0 | 17.0 | 18.0 | 6.2 | 6.4 |
| ໄຊຍະບູລີ | 292.0 | 339.0 | 346.0 | 353.0 | 1.5 | 21.0 | 21.0 | 22.0 | 5.6 | 4.2 |
| ຊຽງຂວາງ | 201.0 | 230.0 | 246.0 | 252.0 | 1.4 | 15.0 | 15.0 | 15.0 | 6.3 | 5.9 |
| ວຽງຈັນ | 287.0 | 389.0 | 430.0 | 442.0 | 3.1 | 21.0 | 19.0 | 20.0 | 5.9 | 4.4 |
| ບໍລິຄຳໄຊ | 164.0 | 225.0 | 233.0 | 241.0 | 3.3 | 15.0 | 16.0 | 16.0 | 5.8 | 5.2 |
| ຄຳມ່ວນ | 273.0 | 337.0 | 345.0 | 353.0 | 2.2 | 21.0 | 21.0 | 22.0 | 5.4 | 5 |
| ສະຫວັນນະເຂດ | 672.0 | 826.0 | 842.0 | 859.0 | 2.1 | 38.0 | 39.0 | 39.0 | 5.4 | 4.4 |
| ສາລະວັນ | 256.0 | 324.0 | 333.0 | 341.0 | 2.4 | 30.0 | 31.0 | 32.0 | 5.5 | 5.5 |
| ເຊກອງ | 64.0 | 85.0 | 87.0 | 90.0 | 2.9 | 11.0 | 11.0 | 12.0 | 7.2 | 5.9 |
| ຈຳປາສັກ | 501.0 | 607.0 | 617.0 | 626.0 | 1.9 | 39.0 | 40.0 | 41.0 | 4.9 | 4.2 |
| ອັດຕະປື | 87.0 | 112.0 | 115.0 | 118.0 | 2.5 | 11.0 | 11.0 | 11.0 | 5.4 | 5.2 |
| ເຂດພິເສດໄຊສົມບູນ | 54.0 | 39.0 | ... | ... | ... | 9.0 | ... | ... | 6.8 | 6.4 |

***ໝາຍເຫດ:*** *ຖັນທີ 17, ( - ) ໝາຍເຖິງຍ້າຍເຂົ້າມາ, (+) ໝາຍເຖິງຍ້າຍອອກໄປ*

***ແຫຼ່ງຂໍ້ມູນ:***

***ຖັນທີ 1, 9, 11, 13 ແລະ 15:*** *ກະຊວງ ແຜນການ ແລະ ການລົງທຶນ – ສູນສະຖິຕິແຫ່ງຊາດ (1997) "ການສຳຫຼວດພົນລະເມືອງ ແລະ ທີ່ຢູ່ອາໄສຂອງ ສປປ ລາວ,1995" (ນະຄອນຫຼວງວຽງຈັນ: 1997)*

***ຖັນທີ 2, 5, 6, 10, 12, 14, 16 ແລະ 17:*** *ກະຊວງ ແຜນການ ແລະ ການລົງທຶນ – ສູນສະຖິຕິແຫ່ງຊາດ (2005) "ການສຳຫຼວດພົນລະເມືອງ ແລະ ທີ່ຢູ່ອາໄສ, 2005: (ນະຄອນຫຼວງວຽງຈັນ: 2005)*

***ຖັນທີ 3, 4, 6 ແລະ 7:*** *ກະຊວງ ແຜນການ ແລະ ການລົງທຶນ, ກົມສະຖິຕິ (2006,2007) "ວາລະສານສະຖິຕິປະຈຳປີ 2006, 2007", ນະຄອນຫຼວງວຽງຈັນ: 2006,2007*

## ຕາຕະລາງ 4: ຂໍ້ມູນດ້ານປະຊາກອນ

| | ອັດຕາການຕາຍ | | ອັດຕາສ່ວນຂອງປະຊາກອນ ທີ່ບໍ່ໄດ້ເກີດໃນເມືອງດຽວກັນ ກັບບ່ອນທີ່ເຂົາເຈົ້າອາໄສຢູ່ | | ອັດຕາສ່ວນຂອງ ປະຊາກອນໃນເຂດ ຊົນນະບົດ | | ການຍ້າຍຖິ່ນຖານ (ຈຳນວນ) |
|---|---|---|---|---|---|---|---|
| | ສ່ວນຮ້ອຍ | | ສ່ວນຮ້ອຍ | ສ່ວນຮ້ອຍ | (% ຂອງຈຳນວນ ທັງໝົດ) | | ຄົນ |
| | 1995 | 2005 | 1995 | 2005 | 1995 | 2005 | 2005 |
| | 11 | 12 | 13 | 14 | 15 | 16 | 17 |
| ສປປ ລາວ | 15.1 | 9.8 | 19 | 18.3 | 83 | 73 | 269,348 |
| ແຂວງ | | | | | | | |
| ນະຄອນຫຼວງວຽງຈັນ | 10.9 | 6.2 | 44.2 | 41.1 | 37.0 | 17.5 | (24,114.00) |
| ຜົ້ງສາລີ | 11.7 | 12.6 | 13.5 | 8.8 | 94.0 | 87.4 | 23,986.76 |
| ຫຼວງນໍ້າທາ | 12.9 | 13.3 | 21.5 | 20.7 | 83.0 | 78.2 | (1,554.00) |
| ອຸດົມໄຊ | 11.1 | 14.9 | 13.6 | 13.3 | 85.0 | 84.8 | 11,323.75 |
| ບໍ່ແກ້ວ | 13.5 | 11.2 | 27.3 | 25.0 | 95.0 | 86.3 | (5,774.00) |
| ຫຼວງພະບາງ | 15.2 | 11.3 | 14.8 | 16.5 | 89.0 | 81.1 | 40,899.52 |
| ຫົວພັນ | 15.1 | 10.1 | 7.8 | 9.0 | 94.0 | 88.2 | 36,386.38 |
| ໄຊຍະບູລີ | 16.2 | 7.8 | 13.4 | 12.5 | 93.0 | 77.3 | 23,751.63 |
| ຊຽງຂວາງ | 15.0 | 10.0 | 23.2 | 21.5 | 93.0 | 79 | 43,777.34 |
| ວຽງຈັນ | 13.9 | 7.7 | 28.5 | 29.0 | 83.0 | 76.5 | (41,329.00) |
| ບໍລິຄຳໄຊ | 16.5 | 9.2 | 22.7 | 24.0 | 94.0 | 73.6 | (17,872.00) |
| ຄຳມ່ວນ | 12.3 | 11.0 | 12.4 | 11.8 | 87.0 | 78.7 | 16,228.53 |
| ສະຫວັນນະເຂດ | 12.1 | 9.4 | 10.9 | 9.3 | 85.0 | 77.5 | 48,831.01 |
| ສາລະວັນ | 12.6 | 11.0 | 10.2 | 8.5 | 94.0 | 91.4 | 26,998.20 |
| ເຊກອງ | 12.9 | 14.4 | 19.5 | 21.5 | 85.0 | 78.7 | 2,710.74 |
| ຈຳປາສັກ | 14.0 | 9.0 | 14.5 | 14.3 | 87.0 | 79.5 | 50,430.24 |
| ອັດຕະປື | 16.6 | 14.4 | 13.6 | 10.8 | 95.0 | 83 | 3,108.06 |
| ເຂດພິເສດໄຊສົມບູນ | 16.9 | 9.9 | 43.7 | 39.4 | 92.0 | 82.6 | 31,559.30 |

***ໝາຍເຫດ:*** *ຖັນທີ 17, ( - ) ໝາຍເຖິງຍ້າຍເຂົ້າມາ, (+) ໝາຍເຖິງຍ້າຍອອກໄປ*

***ແຫຼ່ງຂໍ້ມູນ:***

***ຖັນທີ 1, 9, 11, 13 ແລະ 15:*** *ກະຊວງ ແຜນການ ແລະ ການລົງທຶນ – ສູນສະຖິຕິແຫ່ງຊາດ (1997) "ການສຳຫຼວດພົນລະເມືອງ ແລະ ທີ່ຢູ່ອາໄສຂອງ ສປປ ລາວ,1995" (ນະຄອນຫຼວງວຽງຈັນ: 1997)*

***ຖັນທີ 2, 5, 6, 10, 12, 14, 16 ແລະ 17:*** *ກະຊວງ ແຜນການ ແລະ ການລົງທຶນ – ສູນສະຖິຕິແຫ່ງຊາດ (2005) "ການສຳຫຼວດພົນລະເມືອງ ແລະ ທີ່ຢູ່ອາໄສ, 2005: (ນະຄອນຫຼວງວຽງຈັນ: 2005)*

***ຖັນທີ 3, 4, 6 ແລະ 7:*** *ກະຊວງ ແຜນການ ແລະ ການລົງທຶນ, ກົມສະຖິຕິ (2006,2007) "ວາລະສານສະຖິຕິປະຈຳປີ 2006, 2007", ນະຄອນຫຼວງວຽງຈັນ: 2006,2007*

## ຕາຕະລາງ 5: ການແຈກຢາຍຂອງປະຊາກອນແບ່ງຕາມເພດ ແລະ ແຂວງ

| | ຈຳນວນປະຊາກອນທັງໝົດ | ຍິງ | ຊາຍ | ອັດຕາສ່ວນເພດ | |
|---|---|---|---|---|---|
| | 2005 | 2005 | 2005 | 1995 | 2005 |
| | ຄົນ | ຄົນ | ຄົນ | ສ່ວນຮ້ອຍ | ສ່ວນຮ້ອຍ |
| | 1 | 2 | 3 | 4 | 5 |
| ສປປ ລາວ | 5,621,982.0 | 2,821,431.0 | 2,800,551.0 | 97.7 | 99.2 |
| ຕົວເມືອງ | 1,522,137.0 | 759,094.0 | 763,043.0 | ... | 100.5 |
| ຊົນນະບົດມີເສັ້ນທາງເຂົ້າເຖິງ | 2,895,179.0 | 1,452,837 | 1,442,342 | ... | 99.3 |
| ຊົນນະບົດບໍ່ມີເສັ້ນທາງເຂົ້າເຖິງ | 1,198,069.0 | 607,122 | 590,947 | ... | 97.3 |
| ແຂວງ | | | | | |
| ນະຄອນຫຼວງວຽງຈັນ | 698,318.0 | 349,624.0 | 348,694.0 | 100.4 | 99.7 |
| ຜົ້ງສາລີ | 165,947.0 | 82,838.0 | 83,109.0 | 98.6 | 100.3 |
| ຫຼວງນໍ້າທາ | 145,310.0 | 73,599.0 | 71,711.0 | 95.5 | 97.4 |
| ອຸດົມໄຊ | 265,179.0 | 133,126.0 | 132,053.0 | 98.5 | 99.1 |
| ບໍ່ແກ້ວ | 145,263.0 | 73,162.0 | 72,101.0 | 97.8 | 98.5 |
| ຫຼວງພະບາງ | 407,039.0 | 203,429.0 | 203,610.0 | 98.2 | 100.0 |
| ຫົວພັນ | 280,938.0 | 139,327.0 | 141,611.0 | 98.9 | 101.6 |
| ໄຊຍະບູລີ | 338,669.0 | 167,633.0 | 171,036.0 | 100.0 | 102.3 |
| ຊຽງຂວາງ | 229,596.0 | 113,944.0 | 115,652.0 | 99.1 | 101.5 |
| ວຽງຈັນ | 388,895.0 | 191,433.0 | 197,462.0 | 102.3 | 103.1 |
| ບໍລິຄຳໄຊ | 225,301.0 | 111,293.0 | 114,008.0 | 100.0 | 102.4 |
| ຄຳມ່ວນ | 337,390.0 | 171,825 .0 | 165,565.0 | 94.4 | 96.3 |
| ສະຫວັນນະເຂດ | 825,902.0 | 419,101.0 | 406,801.0 | 96.0 | 97.0 |
| ສາລະວັນ | 324,327.0 | 165,508.0 | 158,819.0 | 93.8 | 95.9 |
| ເຊກອງ | 84,995.0 | 43,041.0 | 41,954.0 | 96.9 | 97.4 |
| ຈຳປາສັກ | 607,370.0 | 306,524.0 | 300,846.0 | 95.3 | 98.1 |
| ອັດຕະປື | 112,120.0 | 57,338.0 | 54,782.0 | 94.1 | 95.5 |
| ເຂດພິເສດໄຊສົມບູນ | 39,423.0 | 18,686.0 | 20,737.0 | 101.5 | 110.9 |

***ຂໍ້ສັງເກດ:*** *ຖັນທີ 4 ແລະ 5, ຕົວເລກທີ່ເກີນ 100 ໝາຍເຖິງ ຕົວເລກຂອງເພດຊາຍທີ່ຫຼາຍກວ່າເພດຍິງ*

***ແຫຼ່ງຂໍ້ມູນ:***
*ກະຊວງ ແຜນການ ແລະ ການລົງທຶນ – ສູນສະຖິຕິແຫ່ງຊາດ (2005) "ການສຳຫຼວດພົນລະເມືອງ ປີ 2005"*

***ໝາຍເຫດ:***
*... : ບໍ່ມີຂໍ້ມູນ*

## ຕາຕະລາງ 6: ການວັດແທກອັດຕາການຕາຍ

| | ອັດຕາການຕາຍຂອງເດັກອ່ອນ | ອັດຕາການຕາຍຂອງເດັກອ່ອນ | | ອັດຕາການຕາຍຂອງຜູ້ເປັນແມ່ | ອັດຕາການຕາຍຂອງເດັກທີ່ມີອາຍຸຕໍ່າກວ່າຫ້າປີ | |
|---|---|---|---|---|---|---|
| | | ເດັກຊາຍ | ເດັກຍິງ | | | |
| | ການຕາຍຕໍ່ການເກີດມີຊີວິດ 1000 ຄົນ | ການຕາຍຕໍ່ການເກີດມີຊີວິດ 1000 ຄົນ | | ການຕາຍຕໍ່ການເກີດມີຊີວິດ 100,000 ຄົນ | ການຕາຍຕໍ່ການເກີດມີຊີວິດ 1000 ຄົນ | |
| | 2005 | 2005 | 2005 | 2005 | 2000 | 2005 |
| | 1 | 2 | 3 | 4 | 5 | 6 |
| ສປປ ລາວ | 70.0 | 75.0 | 61.0 | 405.0 | 107.0 | 68.0 |
| ຕົວເມືອງ | 36.0 | … | … | … | 49.0 | 40.0 |
| ຊົນນະບົດ | … | … | … | … | 114.0 | … |
| ຊົນນະບົດມີເສັ້ນທາງເຂົ້າເຖິງ | 57.0 | … | … | … | … | 69.0 |
| ຊົນນະບົດບໍ່ມີເສັ້ນທາງເຂົ້າເຖິງ | 62.0 | … | … | … | … | 78.0 |
| ແຂວງ | | | | | | |
| ນະຄອນຫຼວງວຽງຈັນ | … | 22.0 | 15.0 | … | … | … |
| ຜົ້ງສາລີ | … | 75.0 | 61.0 | … | … | … |
| ຫຼວງນ້ຳທາ | … | 112.0 | 94.0 | … | … | … |
| ອຸດົມໄຊ | … | 99.0 | 82.0 | … | … | … |
| ບໍ່ແກ້ວ | … | 52.0 | 33.0 | … | … | … |
| ຫຼວງພະບາງ | … | 87.0 | 71.0 | … | … | … |
| ຫົວພັນ | … | 75.0 | 60.0 | … | … | … |
| ໄຊຍະບູລີ | … | 52.0 | 33.0 | … | … | … |
| ຊຽງຂວາງ | … | 75.0 | 61.0 | … | … | … |
| ວຽງຈັນ | … | 42.0 | 32.0 | … | … | … |
| ບໍລິຄຳໄຊ | … | 52.0 | 41.0 | … | … | … |
| ຄຳມ່ວນ | … | 112.0 | 94.0 | … | … | … |
| ສະຫວັນນະເຂດ | … | 75.0 | 60.0 | … | … | … |
| ສາລະວັນ | … | 112.0 | 94.0 | … | … | … |
| ເຊກອງ | … | 140.0 | 118.0 | … | … | … |
| ຈຳປາສັກ | … | 75.0 | 60.0 | … | … | … |
| ອັດຕະປື | … | 113.0 | 94.0 | … | … | … |
| ເຂດພິເສດໄຊສົມບູນ | … | 75.0 | 60.0 | … | … | … |

***ແຫຼ່ງຂໍ້ມູນ:***
*ຖັນທີ  1-4, 10, 12: ຜທ-ສຖຕ (2005), "ການສຳຫຼວດພົນລະເມືອງ ແລະ ທີ່ຢູ່ອາໄສ, 2005"*
*ຖັນທີ  5, 6: ຜທ-ສຖຕ, ການສຳຫຼວດສຸຂະພາບຈະເລີນພັນຂອງລາວ, ປີ 2000 ແລະ 2005*
*ຖັນທີ  9, 11: ຜທ-ສຖຕ (1997), "ການສຳຫຼວດພົນລະເມືອງ ແລະ ທີ່ຢູ່ອາໄສ, 1995"*

***ໝາຍເຫດ:***
*… : ບໍ່ມີຂໍ້ມູນ*

## ຕາຕະລາງ 6: ການວັດແທກອັດຕາການຕາຍ

| | ອາຍຸຍືນສະເລ່ຍ | | | |
|---|---|---|---|---|
| | ເພດຊາຍ | | ເພດຍິງ | |
| | ປີ | ປີ | ປີ | ປີ |
| | 1995 | 2005 | 1995 | 2005 |
| | 9 | 10 | 11 | 12 |
| ສປປ ລາວ | 50 | 59 | 52 | 63 |
| ຕົວເມືອງ | … | … | … | … |
| ຊົນນະບົດ | … | … | … | … |
| ຊົນນະບົດມີເສັ້ນທາງເຂົ້າເຖິງ | … | … | … | … |
| ຊົນນະບົດບໍ່ມີເສັ້ນທາງເຂົ້າເຖິງ | … | … | … | … |
| ແຂວງ | | | | |
| ນະຄອນຫຼວງວຽງຈັນ | 57.0 | 68.0 | 59.0 | 71.0 |
| ຜົ້ງສາລີ | 55.0 | 60.0 | 58.0 | 63.0 |
| ຫຼວງນ້ຳທາ | 52.0 | 56.0 | 55.0 | 59.0 |
| ອຸດົມໄຊ | 55.0 | 58.0 | 58.0 | 60.0 |
| ບໍ່ແກ້ວ | 51.0 | 63.0 | 54.0 | 66.0 |
| ຫຼວງພະບາງ | 50.0 | 59.0 | 53.0 | 62.0 |
| ຫົວພັນ | 51.0 | 60.0 | 53.0 | 63.0 |
| ໄຊຍະບູລີ | 49.0 | 63.0 | 51.0 | 66.0 |
| ຊຽງຂວາງ | 52.0 | 60.0 | 54.0 | 63.0 |
| ວຽງຈັນ | 52.0 | 65.0 | 54.0 | 68.0 |
| ບໍລິຄຳໄຊ | 48.0 | 63.0 | 50.0 | 66.0 |
| ຄຳມ່ວນ | 54.0 | 56.0 | 57.0 | 59.0 |
| ສະຫວັນນະເຂດ | 55.0 | 60.0 | 58.0 | 63.0 |
| ສາລະວັນ | 54.0 | 56.0 | 57.0 | 59.0 |
| ເຊກອງ | 53.0 | 54.0 | 56.0 | 56.0 |
| ຈຳປາສັກ | 53.0 | 60.0 | 55.0 | 63.0 |
| ອັດຕະປື | 52.0 | 55.0 | 55.0 | 58.0 |
| ເຂດພິເສດໄຊສົມບູນ | 47.0 | 60.0 | 50.0 | 63.0 |

***ແຫຼ່ງຂໍ້ມູນ:***
*ຖັນທີ 1-4, 10, 12: ຜທ-ສຖຕ (2005), "ການສຳຫຼວດພົນລະເມືອງ ແລະ ທີ່ຢູ່ອາໄສ, 2005"*
*ຖັນທີ 5, 6: ຜທ-ສຖຕ, ການສຳຫຼວດສຸຂະພາບຈະເລີນພັນຂອງລາວ, ປີ 2000 ແລະ 2005*
*ຖັນທີ 9, 11: ຜທ-ສຖຕ (1997), "ການສຳຫຼວດພົນລະເມືອງ ແລະ ທີ່ຢູ່ອາໄສ, 1995"*

***ໝາຍເຫດ:***
*… : ບໍ່ມີຂໍ້ມູນ*

## ຕາຕະລາງ 7: ຂໍ້ມູນດ້ານສຸຂະພາບ

| | ເດັກນ້ອຍອາຍຸຕໍ່າກວ່າ 5 ປີ ທີ່ມີນໍ້າໜັກຕໍ່າກວ່າມາດຕະຖານ | ພົນລະເມືອງທີ່ບໍ່ສາມາດ ເຂົ້າເຖິງນໍ້າສະອາດ | | ພົນລະເມືອງທີ່ບໍ່ສາມາດ ເຂົ້າເຖິງສຸຂະອະນາໄມທີ່ດີ | |
|---|---|---|---|---|---|
| | ສ່ວນຮ້ອຍ | ສ່ວນຮ້ອຍ | | ສ່ວນຮ້ອຍ | |
| | 2000 | 2002/03 | 2007/08 | 2002/03 | 2007/08 |
| | 1 | 2 | 3 | 4 | 5 |
| ສປປ ລາວ | 40.0 | 50.0 | 66.0 | 49.0 | 34.0 |
| ຕົວເມືອງ | 33.0 | 82.0 | 88.0 | 15.0 | 11.0 |
| ຊົນນະບົດ | 42.0 | … | … | … | … |
| ຊົນນະບົດມີເສັ້ນທາງເຂົ້າເຖິງ | … | 47.0 | 61.0 | 54.0 | 41.0 |
| ຊົນນະບົດບໍ່ມີເສັ້ນທາງເຂົ້າເຖິງ | … | 24.0 | 23.0 | 83.0 | 66.0 |
| ແຂວງ | | | | | |
| ນະຄອນຫຼວງວຽງຈັນ | … | 91.0 | 95.0 | 5.0 | 2.0 |
| ຜົ້ງສາລີ | … | 30.0 | 60.0 | 79.0 | 69.0 |
| ຫຼວງນໍ້າທາ | … | 57.0 | 82.0 | 47.0 | 38.0 |
| ອຸດົມໄຊ | … | 17.0 | 68.0 | 58.0 | 30.0 |
| ບໍ່ແກ້ວ | … | 59.0 | 65.0 | 32.0 | 33.0 |
| ຫຼວງພະບາງ | … | 42.0 | 70.0 | 60.0 | 34.0 |
| ຫົວພັນ | … | 22.0 | 63.0 | 51.0 | 38.0 |
| ໄຊຍະບູລີ | … | 46.0 | 58.0 | 15.0 | 6.0 |
| ຊຽງຂວາງ | … | 27.0 | 58.0 | 44.0 | 28.0 |
| ວຽງຈັນ | … | 50.0 | 71.0 | 23.0 | 12.0 |
| ບໍລິຄໍາໄຊ | … | 39.0 | 76.0 | 40.0 | 8.0 |
| ຄໍາມ່ວນ | … | 41.0 | 37.0 | 78.0 | 44.0 |
| ສະຫວັນນະເຂດ | … | 55.0 | 60.0 | 70.0 | 51.0 |
| ສາລະວັນ | … | 54.0 | 71.0 | 84.0 | 80.0 |
| ເຊກອງ | … | 76.0 | 65.0 | 65.0 | 53.0 |
| ຈໍາປາສັກ | … | 50.0 | 41.0 | 61.0 | 51.0 |
| ອັດຕະປື | … | 37.0 | 95.0 | 53.0 | 39.0 |
| ເຂດພິເສດໄຊສົມບູນ | … | 74.0 | … | 26.0 | … |

***ແຫຼ່ງຂໍ້ມູນ:***
***ຖັນທີ 1:*** *ຜທ-ສຖຕ ແລະ ກະຊວງ ສາທາລະນະສຸກ (2001), ການສໍາຫຼວດສຸຂະພາບແຫ່ງຊາດ, 2000*
***ຖັນທີ 2-5:*** *ຜທ-ສຖຕ (2004), ການສໍາຫຼວດການຊົມໃຊ້ ແລະ ໃຊ້ຈ່າຍຂອງຄົວເຮືອນ (LECS) 2002/03 ແລະ 2007/08*

***ໝາຍເຫດ:***
*… : ບໍ່ມີຂໍ້ມູນ*

# ເອກະສານຊ້ອນທ້າຍ II:

## ຂໍ້ມູນດ້ານເສດຖະກິດມະຫາພາກ ແລະ ການສຶກສາ

ຕາຕະລາງ 8: ຂໍ້ມູນການສຶກສາ ແລະ ຊັບພະຍາກອນມະນຸດ 233
ຕາຕະລາງ 9: ຂໍ້ມູນກ່ຽວກັບຕະຫຼາດ, ຄົມມະນາຄົມ ແລະ ການຂົນສົ່ງ 237
ຕາຕະລາງ 10: ລວມຍອດຜະລິດຕະພັນພາຍໃນ ແລະ ຂໍ້ມູນທີ່ກ່ຽວຂ້ອງ 241



## ຕາຕະລາງ 8: ຂໍ້ມູນການສຶກສາ ແລະ ຊັບພະຍາກອນມະນຸດ

| | ອັດຕາການຮູ້ໜັງສືຂອງຜູ້ມີອາຍຸ 15+ | | | | ຈຳນວນປີຮຽນສະເລ່ຍ (*) | | | |
|---|---|---|---|---|---|---|---|---|
| | ຈຳນວນລວມ ອາຍຸ 15+ | ເພດຊາຍ ອາຍຸ 15+ | ເພດຍິງ ອາຍຸ 15+ | ອັດຕາການ ຮຽນ ຈົບຊັ້ນປະຖົມ | ຊາຍ | ຍິງ | ຊາຍ | ຍິງ |
| | ສ່ວນຮ້ອຍ | | | ສ່ວນຮ້ອຍ | ຈຳນວນປີ | ຈຳນວນປີ | ຈຳນວນປີ | ຈຳນວນປີ |
| | ລວມທັງໝົດ | ເພດຊາຍ | ເພດຍິງ | | | | | |
| | 2005 | 2005 | 2005 | 2004/05 | 2002/03 | 2002/03 | 2007/08 | 2007/08 |
| | 1 | 2 | 3 | 4 | 5 | 6 | 7 | 8 |
| **ສປປ ລາວ** | 73.0 | 83.0 | 63.0 | 44.2 | 5.0 | 5.0 | 9.0 | 7.0 |
| ຕົວເມືອງ | 89.0 | 94.0 | 85.0 | … | 7.0 | 7.0 | 10.0 | 9.0 |
| ຊົນນະບົດ | … | … | … | … | 7.0 | 7.0 | 8.0 | 7.0 |
| ຊົນນະບົດມີເສັ້ນທາງເຂົ້າເຖິງ | 70.0 | 81.0 | 59.0 | … | … | … | … | … |
| ຊົນນະບົດບໍ່ມີເສັ້ນທາງເຂົ້າເຖິງ | 54.0 | 68.0 | 41.0 | … | … | … | … | … |
| **ແຂວງ** | | | | | | | | |
| ນະຄອນຫຼວງວຽງຈັນ | 92.0 | 95.0 | 88.0 | 88.1 | 8.0 | 7.0 | 10.0 | 9.0 |
| ຜົ້ງສາລີ | 43.0 | 53.0 | 34.0 | 19.9 | 4.0 | 4.0 | 7.0 | 5.0 |
| ຫຼວງນ້ຳທາ | 51.0 | 63.0 | 39.0 | 29.3 | 5.0 | 4.0 | 7.0 | 5.0 |
| ອຸດົມໄຊ | 56.0 | 73.0 | 40.0 | 31.5 | 4.0 | 3.0 | 8.0 | 5.0 |
| ບໍ່ແກ້ວ | 58.0 | 72.0 | 45.0 | 27.5 | 4.0 | 4.0 | 8.0 | 6.0 |
| ຫຼວງພະບາງ | 67.0 | 80.0 | 55.0 | 41.8 | 5.0 | 4.0 | 9.0 | 7.0 |
| ຫົວພັນ | 65.0 | 78.0 | 51.0 | 31.1 | 5.0 | 4.0 | 9.0 | 7.0 |
| ໄຊຍະບູລີ | 80.0 | 87.0 | 74.0 | 80.3 | 6.0 | 5.0 | 9.0 | 8.0 |
| ຊຽງຂວາງ | 73.0 | 84.0 | 62.0 | 35.5 | 5.0 | 4.0 | 9.0 | 8.0 |
| ວຽງຈັນ | 80.0 | 88.0 | 71.0 | 58.4 | 6.0 | 5.0 | 9.0 | 8.0 |
| ບໍລິຄຳໄຊ | 77.0 | 86.0 | 68.0 | 63.1 | 5.0 | 5.0 | 9.0 | 9.0 |
| ຄຳມ່ວນ | 70.0 | 81.0 | 60.0 | 45.0 | 5.0 | 4.0 | 9.0 | 7.0 |
| ສະຫວັນນະເຂດ | 69.0 | 79.0 | 59.0 | 42.6 | 5.0 | 5.0 | 8.0 | 7.0 |
| ສາລະວັນ | 62.0 | 75.0 | 49.0 | 27.8 | 4.0 | 4.0 | 8.0 | 6.0 |
| ເຊກອງ | 62.0 | 76.0 | 48.0 | 47.5 | 4.0 | 3.0 | 8.0 | 6.0 |
| ຈຳປາສັກ | 82.0 | 90.0 | 74.0 | 47.3 | 5.0 | 5.0 | 10.0 | 8.0 |
| ອັດຕະປື | 64.0 | 77.0 | 52.0 | 43.5 | 5.0 | 4.0 | 9.0 | 8.0 |
| ເຂດພິເສດໄຊສົມບູນ | 73.0 | 85.0 | 59.0 | … | 5.0 | 4.0 | … | … |

***ແຫຼ່ງຂໍ້ມູນ:***

***ຖັນທີ 1-3:*** *ຜທ-ສຖຕ (2005), "ການສຳຫຼວດພົນລະເມືອງ ແລະ ທີ່ຢູ່ອາໄສ, 2005"*

***ຖັນທີ 4 :*** *ບົດລາຍງານດ້ານວິຊາການ (Technical Background Paper report:TBP)*

***ຖັນທີ 5,6,9,11,13,15:*** *ຄະນະກຳມະການ ແຜນການ ແລະ ການລົງທຶນ - ສູນສະຖິຕິແຫ່ງຊາດ (2004) "ຄົວເຮືອນຂອງ ສປປ ລາວ: ດັດຊະນີພາຍທາງດ້ານເສດຖະກິດ ແລະ ສັງຄົມ, ການສຳຫຼວດການຊົມໃຊ້ ແລະ ການໃຊ້ຈ່າຍຂອງຄົວເຮືອນ, 2002/2003*

***ຖັນທີ 7,8,10,12,14,16:*** *ຄະນະກຳມະການ ແຜນການ ແລະ ການລົງທຶນ - ສູນສະຖິຕິແຫ່ງຊາດ (2009) "ຄົວເຮືອນຂອງ ສປປ ລາວ: ດັດຊະນີພາຍທາງດ້ານເສດຖະກິດ ແລະ ສັງຄົມ, ການສຳຫຼວດການຊົມໃຊ້ ແລະ ການໃຊ້ຈ່າຍຂອງຄົວເຮືອນ, 2007/2008 (LESC 4)" (ນະຄອນຫຼວງວຽງຈັນ: 2009.)*

***ໝາຍເຫດ:***

***…** : ບໍ່ມີຂໍ້ມູນ*

## ຕາຕະລາງ 8: ຂໍ້ມູນການສຶກສາ ແລະ ຊັບພະຍາກອນມະນຸດ

| | ຈຳນວນນັກຮຽນຕໍ່ຄູສອນຊັ້ນປະຖົມໜຶ່ງຄົນ | | ອັດຕາສ່ວນຂອງບ້ານທີ່ມີປຶ້ມແບບຮຽນສຳລັບນັກຮຽນຊັ້ນປະຖົມ | | ອັດຕາສ່ວນຂອງບ້ານທີ່ມີໂຮງຮຽນປະຖົມຢູ່ໃນບ້ານ | | ອັດຕາສ່ວນຂອງບ້ານທີ່ມີໂຮງຮຽນມັດທະຍົມຕອນຕົ້ນຢູ່ໃນບ້ານ | |
|---|---|---|---|---|---|---|---|---|
| | ຈຳນວນຄົນ | ຈຳນວນຄົນ | ສ່ວນຮ້ອຍ | ສ່ວນຮ້ອຍ | ສ່ວນຮ້ອຍ | ສ່ວນຮ້ອຍ | ສ່ວນຮ້ອຍ | ສ່ວນຮ້ອຍ |
| | 2002/03 | 2007/08 | 2002/03 | 2007/08 | 2002/03 | 2007/08 | 2002/03 | 2007/08 |
| | 9 | 10 | 11 | 12 | 13 | 14 | 15 | 16 |
| ສປປ ລາວ | 22.0 | 20.0 | 77.0 | 83.0 | 79.0 | 89.0 | 8.0 | 18.0 |
| ຕົວເມືອງ | 24.0 | 20.0 | 81.0 | 91.0 | 80.0 | 83.0 | 19.0 | 38.0 |
| ຊົນນະບົດ | ... | ... | ... | ... | ... | ... | ... | ... |
| ຊົນນະບົດມີເສັ້ນທາງເຂົ້າເຖິງ | 21.0 | 19.0 | 78.0 | 82.0 | 81.0 | 91.0 | 11.0 | 13.0 |
| ຊົນນະບົດບໍ່ມີເສັ້ນທາງເຂົ້າເຖິງ | 23.0 | 22.0 | 75.0 | 74.0 | 76.0 | 88.0 | 0.0 | 3.0 |
| ແຂວງ | | | | | | | | |
| ນະຄອນຫຼວງວຽງຈັນ | 19.0 | 23.0 | 89.0 | 93.0 | 88.0 | 83.0 | 26.0 | 38.0 |
| ຜົ້ງສາລີ | 15.0 | 15.0 | 95.0 | 87.0 | 95.0 | 96.0 | 0.0 | 4.0 |
| ຫຼວງນ້ຳທາ | 18.0 | 18.0 | 75.0 | 87.0 | 75.0 | 100.0 | 4.0 | 17.0 |
| ອຸດົມໄຊ | 14.0 | 21.0 | 76.0 | 75.0 | 78.0 | 76.0 | 16.0 | 5.0 |
| ບໍ່ແກ້ວ | 31.0 | 15.0 | 56.0 | 84.0 | 56.0 | 83.0 | 5.0 | 17.0 |
| ຫຼວງພະບາງ | 29.0 | 23.0 | 78.0 | 90.0 | 78.0 | 88.0 | 4.0 | 9.0 |
| ຫົວພັນ | 16.0 | 19.0 | 88.0 | 88.0 | 88.0 | 94.0 | 3.0 | 15.0 |
| ໄຊຍະບູລີ | 15.0 | 12.0 | 94.0 | 73.0 | 94.0 | 94.0 | 10.0 | 23.0 |
| ຊຽງຂວາງ | 18.0 | 17.0 | 88.0 | 78.0 | 88.0 | 92.0 | 9.0 | 24.0 |
| ວຽງຈັນ | 23.0 | 19.0 | 73.0 | 79.0 | 73.0 | 87.0 | 14.0 | 29.0 |
| ບໍລິຄຳໄຊ | 37.0 | 27.0 | 88.0 | 76.0 | 88.0 | 74.0 | 6.0 | 13.0 |
| ຄຳມ່ວນ | 25.0 | 19.0 | 84.0 | 86.0 | 84.0 | 82.0 | 7.0 | 12.0 |
| ສະຫວັນນະເຂດ | 25.0 | 20.0 | 70.0 | 81.0 | 75.0 | 90.0 | 9.0 | 17.0 |
| ສາລະວັນ | 27.0 | 23.0 | 58.0 | 84.0 | 63.0 | 89.0 | 7.0 | 17.0 |
| ເຊກອງ | 15.0 | 19.0 | 65.0 | 75.0 | 65.0 | 94.0 | 7.0 | 12.0 |
| ຈຳປາສັກ | 32.0 | 25.0 | 69.0 | 85.0 | 77.0 | 92.0 | 5.0 | 14.0 |
| ອັດຕະປື | 22.0 | 19.0 | 87.0 | 83.0 | 89.0 | 100.0 | 22.0 | 28.0 |
| ເຂດພິເສດໄຊສົມບູນ | 24.0 | … | 91.0 | … | 91.0 | … | 6.0 | … |

***ແຫຼ່ງຂໍ້ມູນ:***

***ຖັນທີ 1-3:*** *ຜທ-ສຖຕ (2005), "ການສຳຫຼວດພົນລະເມືອງ ແລະ ທີ່ຢູ່ອາໄສ, 2005"*

***ຖັນທີ 4 :*** *ບົດລາຍງານດ້ານວິຊາການ (Technical Background Paper report:TBP)*

***ຖັນທີ 5,6,9,11,13,15:*** *ຄະນະກຳມະການ ແຜນການ ແລະ ການລົງທຶນ - ສູນສະຖິຕິແຫ່ງຊາດ (2004) "ຄົວເຮືອນຂອງ ສປປ ລາວ: ດັດຊະນີໝາຍທາງດ້ານເສດຖະກິດ ແລະ ສັງຄົມ, ການສຳຫຼວດການຊົມໃຊ້ ແລະ ການໃຊ້ຈ່າຍຂອງຄົວເຮືອນ, 2002/2003*

***ຖັນທີ 7,8,10,12,14,16:*** *ຄະນະກຳມະການ ແຜນການ ແລະ ການລົງທຶນ - ສູນສະຖິຕິແຫ່ງຊາດ (2009) "ຄົວເຮືອນຂອງ ສປປ ລາວ: ດັດຊະນີໝາຍທາງດ້ານເສດຖະກິດ ແລະ ສັງຄົມ, ການສຳຫຼວດການຊົມໃຊ້ ແລະ ການໃຊ້ຈ່າຍຂອງຄົວເຮືອນ, 2007/2008 (LESC 4)" (ນະຄອນຫຼວງວຽງຈັນ: 2009.)*

***ໝາຍເຫດ:***

*... : ບໍ່ມີຂໍ້ມູນ*

## ຕາຕະລາງ 8: ຂໍ້ມູນການສຶກສາ ແລະ ຊັບພະຍາກອນມະນຸດ

| | ອັດຕາການອອກໂຮງຮຽນກ່ອນຮຽນຈົບ ແບ່ງຕາມຊັ້ນຮຽນ ໃນປີ 2004/05 | | | |
|---|---|---|---|---|
| | ປີ 1 | | ປີ 2 | |
| | ຊາຍ | ຍິງ | ຊາຍ | ຍິງ |
| | 1 | 2 | 3 | 4 |
| ສປປ ລາວ | 12.7 | 13.2 | 6.7 | 6.9 |
| ແຂວງ | | | | |
| ນະຄອນຫຼວງວຽງຈັນ | 9.7 | 8.7 | 3.6 | 2.8 |
| ຜົ້ງສາລີ | 17.6 | 21.0 | 14.9 | 15.1 |
| ຫຼວງນໍ້າທາ | 12.3 | 20.4 | 12.0 | 15.6 |
| ອຸດົມໄຊ | 27.9 | 30.6 | 9.8 | 12.4 |
| ບໍ່ແກ້ວ | 14.0 | 11.2 | 8.7 | 9.1 |
| ຫຼວງພະບາງ | 14.8 | 12.9 | 7.0 | 8.0 |
| ຫົວພັນ | 15.3 | 14.5 | 3.2 | 4.6 |
| ໄຊຍະບູລີ | 4.1 | 4.4 | 2.6 | 3.0 |
| ຊຽງຂວາງ | 6.1 | 9.5 | 1.6 | 1.8 |
| ວຽງຈັນ | 8.9 | 10.0 | 1.4 | 0.7 |
| ບໍລິຄໍາໄຊ | 8.8 | 8.9 | 3.4 | 3.2 |
| ຄໍາມ່ວນ | 13.9 | 15.9 | 7.1 | 7.5 |
| ສະຫວັນນະເຂດ | 8.1 | 7.3 | 9.6 | 8.8 |
| ສາລະວັນ | 16.5 | 18.3 | 12.4 | 12.5 |
| ເຊກອງ | 17.8 | 13.6 | 9.9 | 9.0 |
| ຈໍາປາສັກ | 11.5 | 10.5 | 6.7 | 7.4 |
| ອັດຕະປື | 21.1 | 20.3 | 7.2 | 10.5 |

***ແຫຼ່ງຂໍ້ມູນ:***
***ຖັນທີ 1-10:*** *ບົດລາຍງານດ້ານວິຊາການ (Technical Background Paper report:TBP)*

| | ອັດຕາການຮູ້ໜັງ ສືຂອງ ໄວໜຸ່ມ ອາຍຸ 15-24 ປີ | ອັດຕາການລົງທະບຽນຮຽນ ສຸດທິໃນຊັ້ນປະຖົມສຶກສາ | ລວມຍອດອັດຕາການ ລົງທະບຽນຮຽນ ໃນຊັ້ນປະຖົມສຶກສາ (*) | ລວມຍອດອັດຕາການລົງ ທະບຽນຮຽນໃນຊັ້ນມັດ ທະຍົມຕອນຕົ້ນ (*) | ສັດສ່ວນຂອງນັກຮຽນ ທີ່ຮຽນແຕ່ ປີ1 ຈົນເຖິງ ປີ5 |
|---|---|---|---|---|---|
| | ສ່ວນຮ້ອຍ | ສ່ວນຮ້ອຍ | ສ່ວນຮ້ອຍ | ສ່ວນຮ້ອຍ | ສ່ວນຮ້ອຍ |
| | 2005/2006 | 2005/2006 | 2005/2006 | 2005/2006 | 2005/2006 |
| | 1 | 2 | 3 | 4 | 5 |
| ສປປ ລາວ | 83.9 | 83.9 | 121.9 | 51.7 | 60.2 |
| ຊາຍ | 82.5 | 86.5 | 129.8 | 57 | 60.7 |
| ຍິງ | 63.2 | 81.2 | 113.7 | 46.2 | 59.6 |

***( * ) ອັດຕາການລອດເຫຼືອຈົນເຖິງ ປີ 5***
***ຖັນທີ 1-5 :*** *ບົດລາຍງານດ້ານວິຊາການ (Technical Background Paper report:TBP)*

## ຕາຕະລາງ 8: ຂໍ້ມູນການສຶກສາ ແລະ ຊັບພະຍາກອນມະນຸດ

| | ອັດຕາການອອກໂຮງຮຽນກ່ອນຮຽນຈົບແບ່ງຕາມຊັ້ນຮຽນ ໃນປີ 2004/05 | | | | | |
|---|---|---|---|---|---|---|
| | ປໍ 3 | | ປໍ 4 | | ປໍ 5 | |
| | ຊາຍ | ຍິງ | ຊາຍ | ຍິງ | ຊາຍ | ຍິງ |
| | 5 | 6 | 7 | 8 | 9 | 10 |
| ສປປ ລາວ | 7.8 | 7.7 | 6.4 | 8.1 | 10.0 | 9.5 |
| ແຂວງ | | | | | | |
| ນະຄອນຫຼວງວຽງຈັນ | 3.7 | 3.4 | 5.3 | 3.8 | 14.9 | 14.0 |
| ຜົ້ງສາລີ | 12.1 | 7.6 | 5.8 | 7.2 | 26.8 | 14.6 |
| ຫຼວງນໍ້າທາ | 8.4 | 6.9 | 8.9 | 6.3 | 10.1 | 9.3 |
| ອຸດົມໄຊ | 9.0 | 7.8 | 4.1 | 7.8 | 9.7 | 8.0 |
| ບໍ່ແກ້ວ | 10.3 | 10.7 | 6.0 | 7.1 | 16.0 | 12.2 |
| ຫຼວງພະບາງ | 9.8 | 10.4 | 5.9 | 8.0 | 4.8 | 7.7 |
| ຫົວພັນ | 6.2 | 4.6 | 5.8 | 8.3 | 6.7 | 4.1 |
| ໄຊຍະບູລີ | 3.8 | 2.4 | 3.0 | 2.7 | 2.9 | 1.1 |
| ຊຽງຂວາງ | 4.5 | 4.3 | 1.4 | 7.1 | 2.8 | 19.3 |
| ວຽງຈັນ | 4.3 | 3.8 | 3.0 | 5.3 | 14.5 | 11.5 |
| ບໍລິຄໍາໄຊ | 5.1 | 3.8 | 0.8 | 4.9 | 2.5 | 5.9 |
| ຄໍາມ່ວນ | 8.4 | 9.1 | 6.5 | 8.4 | 7.8 | 5.9 |
| ສະຫວັນນະເຂດ | 10.9 | 10.9 | 12.7 | 11.9 | 12.8 | 11.7 |
| ສາລະວັນ | 13.6 | 14.4 | 9.2 | 17.9 | 15.9 | 11.2 |
| ເຊກອງ | 12.1 | 15.9 | 8.9 | 13.2 | 17.3 | 13.4 |
| ຈໍາປາສັກ | 8.7 | 10.4 | 10.3 | 11.4 | 7.7 | 6.7 |
| ອັດຕະປື | 10.0 | 11.2 | 7.0 | 14.1 | 14.6 | 10.2 |

***ແຫຼ່ງຂໍ້ມູນ:***
***ຖັນທີ 1-10:*** *ບົດລາຍງານດ້ານວິຊາການ (Technical Background Paper report:TBP)*

## ຕາຕະລາງ 9: ຂໍ້ມູນກ່ຽວກັບຕະຫຼາດ, ຄົມມະນາຄົມ ແລະ ການຂົນສົ່ງ

| | ສັດສ່ວນຂອງບ້ານ | | | | | | | |
|---|---|---|---|---|---|---|---|---|
| | ມີໄຟຟ້າໃຊ້ | | ສາມາດເຂົ້າເຖິງໄດ້ ໃນລະດູແລ້ງ | | ສາມາດເຂົ້າເຖິງໄດ້ ໃນລະດູຝົນ | | ມີປ້າຍຈອດລົດເມ ຢູ່ໃນບ້ານ | |
| | ສ່ວນຮ້ອຍ | | ສ່ວນຮ້ອຍ | | ສ່ວນຮ້ອຍ | | ສ່ວນຮ້ອຍ | |
| | 2002/03 | 2007/08 | 2002/03 | 2007/08 | 2002/03 | 2007/08 | 2002/03 | 2007/08 |
| | 1 | 2 | 3 | 4 | 5 | 6 | 7 | 8 |
| ສປປ ລາວ | 33.0 | 61.0 | 71.0 | 100.0.0 | 54.0 | 84.0 | 45.0 | 66.0 |
| ຕົວເມືອງ | 95.0 | 99.0 | 100.0.0 | 100.0.0 | 97.0 | 98.0 | 96.0 | 79.0 |
| ຊົນນະບົດມີເສັ້ນທາງເຂົ້າເຖິງ | 33.0 | 53.0 | 84.0 | 100.0 | 65.0 | 80.0 | 54.0 | 55.0 |
| ຊົນນະບົດບໍ່ມີເສັ້ນທາງເຂົ້າເຖິງ | 13.0 | 26.0 | 35.0 | 83.0 | 17.0 | 17.0 | 11.0 | 93.0 |
| ແຂວງ | | | | | | | | |
| ນະຄອນຫຼວງວຽງຈັນ | 100.0.0 | 100.0.0 | 100.0.0 | 100.0 | 100.0 | 100.0 | 98.0 | 88.0 |
| ຜົ້ງສາລີ | 23.0 | 38.0 | 32.0 | 100.0 | 27.0 | 55.0 | 19.0 | 70.0 |
| ຫຼວງນໍ້າທາ | 6.0 | 52.0 | 47.0 | 100.0 | 34.0 | 89.0 | 34.0 | 74.0 |
| ອຸດົມໄຊ | 9.0 | 33.0 | 51.0 | 100.0 | 26.0 | 65.0 | 26.0 | 52.0 |
| ບໍ່ແກ້ວ | 14.0 | 54.0 | 76.0 | 95.0 | 44.0 | 65.0 | 46.0 | 58.0 |
| ຫຼວງພະບາງ | 34.0 | 65.0 | 53.0 | 100.0 | 51.0 | 77.0 | 45.0 | 71.0 |
| ຫົວພັນ | 26.0 | 44.0 | 41.0 | 100.0 | 28.0 | 78.0 | 23.0 | 32.0 |
| ໄຊຍະບູລີ | 28.0 | 60.0 | 77.0 | 100.0 | 71.0 | 85.0 | 68.0 | 63.0 |
| ຊຽງຂວາງ | 41.0 | 40.0 | 83.0 | 100.0 | 41.0 | 95.0 | 18.0 | 64.0 |
| ວຽງຈັນ | 54.0 | 84.0 | 93.0 | 100.0 | 92.0 | 100.0 | 74.0 | 76.0 |
| ບໍລິຄໍາໄຊ | 54.0 | 74.0 | 74.0 | 100.0 | 63.0 | 95.0 | 53.0 | 78.0 |
| ຄໍາມ່ວນ | 48.0 | 74.0 | 78.0 | 100.0 | 54.0 | 73.0 | 48.0 | 52.0 |
| ສະຫວັນນະເຂດ | 35.0 | 69.0 | 96.0 | 100.0 | 64.0 | 87.0 | 44.0 | 69.0 |
| ສາລະວັນ | 18.0 | 50.0 | 83.0 | 100.0 | 65.0 | 76.0 | 52.0 | 42.0 |
| ເຊກອງ | 42.0 | 29.0 | 74.0 | 100.0 | 58.0 | 79.0 | 46.0 | 71.0 |
| ຈໍາປາສັກ | 26.0 | 67.0 | 64.0 | 100.0 | 52.0 | 85.0 | 50.0 | 81.0 |
| ອັດຕະປື | 16.0 | 33.0 | 85.0 | 100.0 | 53.0 | 92.0 | 38.0 | 72.0 |

***ແຫຼ່ງຂໍ້ມູນ:***

***ຖັນທີ 1, 3, 5, 7, 9, 11, 13:*** *ຄະນະກໍາມະການ ແຜນການ ແລະ ການລົງທຶນ - ສູນສະຖິຕິແຫ່ງຊາດ (2004) "ຄົວເຮືອນ ຂອງ ສປປ ລາວ: ດັດຊະນີພາຍທາງດ້ານເສດຖະກິດ ແລະ ສັງຄົມ, ການສໍາຫຼວດການຊົມໃຊ້ ແລະ ໃຊ້ຈ່າຍຂອງຄົວເຮືອນ, 2002/2003 (LESC 3)" (ນະຄອນຫຼວງວຽງຈັນ: 2004.)*

***ຖັນທີ 2, 4, 6, 8, 10, 12, 14:*** *ຄະນະກໍາມະການ ແຜນການ ແລະ ການລົງທຶນ - ສູນສະຖິຕິແຫ່ງຊາດ (2009) "ຄົວເຮືອນ ຂອງ ສປປ ລາວ: ດັດຊະນີພາຍທາງດ້ານເສດຖະກິດ ແລະ ສັງຄົມ, ການສໍາຫຼວດການຊົມໃຊ້ ແລະ ໃຊ້ຈ່າຍຂອງຄົວເຮືອນ, 2007/2008 (LESC 4)" (ນະຄອນຫຼວງວຽງຈັນ: 2009.)*

***ໝາຍເຫດ:***

*... : ບໍ່ມີຂໍ້ມູນ*

## ຕາຕະລາງ 9: ຂໍ້ມູນກ່ຽວກັບຕະຫຼາດ, ຄົມມະນາຄົມ ແລະ ການຂົນສົ່ງ

| | ໄລຍະທາງສະເລ່ຍແຕ່ບ້ານຫາ | | | | | |
|---|---|---|---|---|---|---|
| | ຖະໜົນທີ່ໃກ້ທີ່ສຸດ | | ສະຖານີຂົນສົ່ງໂດຍສານ | | ຫ້ອງການໄປສະນີ | |
| | ກມ | | ກມ | | ກມ | |
| | 2002/03 | 2007/08 | 2002/03 | 2007/08 | 2002/03 | 2007/08 |
| | 9 | 10 | 11 | 12 | 13 | 14 |
| ສປປ ລາວ | 5.0 | 17.0 | 10.0 | 10.0 | 23.0 | 21.0 |
| ຕົວເມືອງ | 0.0 | 0.0 | 0.0 | 5.0 | 5.0 | 8.0 |
| ຊົນນະບົດມີເສັ້ນທາງເຂົ້າເຖິງ | 2.0 | 5.0 | 6.0 | 11.0 | 22.0 | 22.0 |
| ຊົນນະບົດບໍ່ມີເສັ້ນທາງເຂົ້າເຖິງ | 12.0 | 18.0 | 22.0 | 10.0 | 32.0 | 40.0 |
| ແຂວງ | | | | | | |
| ນະຄອນຫຼວງວຽງຈັນ | 0.0.0 | 0.0 | 0.0 | 10.0 | 9.0 | 7.0 |
| ຜົ້ງສາລີ | 16.0 | 14.0 | 19.0 | 9.0 | 38.0 | 37.0 |
| ຫຼວງນ້ຳທາ | 16.0 | 33.0 | 23.0 | 10.0 | 30.0 | 28.0 |
| ອຸດົມໄຊ | 7.0 | 11.0 | 15.0 | 6.0 | 29.0 | 19.0 |
| ບໍ່ແກ້ວ | 8.0 | 26.0 | 10.0 | 7.0 | 23.0 | 25.0 |
| ຫຼວງພະບາງ | 10.0 | 21.0 | 11.0 | 6.0 | 23.0 | 35.0 |
| ຫົວພັນ | 9.0 | 18.0 | 19.0 | 10.0 | 31.0 | 34.0 |
| ໄຊຍະບູລີ | 2.0 | 5.0 | 4.0 | 15.0 | 17.0 | 19.0 |
| ຊຽງຂວາງ | 8.0 | 14.0 | 18.0 | 9.0 | 26.0 | 29.0 |
| ວຽງຈັນ | 2.0 | 5.0 | 4.0 | 8.0 | 18.0 | 13.0 |
| ບໍລິຄຳໄຊ | 5.0 | 13.0 | 5.0 | 9.0 | 16.0 | 19.0 |
| ຄຳມ່ວນ | 1.0 | 7.0 | 5.0 | 8.0 | 29.0 | 18.0 |
| ສະຫວັນນະເຂດ | 1.0 | 4.0 | 7.0 | 11.0 | 22.0 | 18.0 |
| ສາລະວັນ | 1.0 | 18.0 | 8.0 | 11.0 | 22.0 | 15.0 |
| ເຊກອງ | 12.0 | 51.0 | 21.0 | 10.0 | 20.0 | 24.0 |
| ຈຳປາສັກ | 2.0 | 10.0 | 3.0 | 9.0 | 16.0 | 18.0 |
| ອັດຕະປື | 3.0 | 18.0 | 25.0 | 11.0 | 16.0 | 24.0 |

***ແຫຼ່ງຂໍ້ມູນ:***

***ຖັນທີ 1, 3, 5, 7, 9, 11, 13:*** *ຄະນະກຳມະການ ແຜນການ ແລະ ການລົງທຶນ - ສູນສະຖິຕິແຫ່ງຊາດ (2004) "ຄົວເຮືອນ ຂອງ ສປປ ລາວ: ດັດຊະນີໝາຍທາງດ້ານເສດຖະກິດ ແລະ ສັງຄົມ, ການສຳຫຼວດການຊົມໃຊ້ ແລະ ໃຊ້ຈ່າຍຂອງຄົວເຮືອນ, 2002/2003 (LESC 3)" (ນະຄອນຫຼວງວຽງຈັນ: 2004.)*

***ຖັນທີ 2, 4, 6, 8, 10, 12, 14:*** *ຄະນະກຳມະການ ແຜນການ ແລະ ການລົງທຶນ - ສູນສະຖິຕິແຫ່ງຊາດ (2009) "ຄົວເຮືອນ ຂອງ ສປປ ລາວ: ດັດຊະນີໝາຍທາງດ້ານເສດຖະກິດ ແລະ ສັງຄົມ, ການສຳຫຼວດການຊົມໃຊ້ ແລະ ໃຊ້ຈ່າຍຂອງຄົວເຮືອນ, 2007/2008 (LESC 4)" (ນະຄອນຫຼວງວຽງຈັນ: 2009.)*

***ໝາຍເຫດ:***

*... : ບໍ່ມີຂໍ້ມູນ*

## ຕາຕະລາງ 9: ຂໍ້ມູນກ່ຽວກັບຕະຫຼາດ, ຄົມມະນາຄົມ ແລະ ການຂົນສົ່ງ

| | ສັດສ່ວນຂອງຄົວເຮືອນທີ່ມີກຳມະສິດໃນການຄອບຄອງ | | | | | | | |
|---|---|---|---|---|---|---|---|---|
| | ລົດໃຫຍ່ | | ລົດຈັກ | | ລົດຖີບ | | ໂທລະທັດ | |
| | ສ່ວນຮ້ອຍ | ສ່ວນຮ້ອຍ | ສ່ວນຮ້ອຍ | ສ່ວນຮ້ອຍ | ສ່ວນຮ້ອຍ | ສ່ວນຮ້ອຍ | ສ່ວນຮ້ອຍ | ສ່ວນຮ້ອຍ |
| | 2002/03 | 2007/08 | 2002/03 | 2007/08 | 2002/03 | 2007/08 | 2002/03 | 2007/08 |
| | 1 | 2 | 3 | 4 | 5 | 6 | 7 | 8 |
| ສປປ ລາວ | 4.0 | 7.0 | 22.0 | 51.0 | 54.0 | 39.0 | 41.0 | 53.0 |
| ຕົວເມືອງ | 11.0 | 15.0 | 54.0 | 67.0 | 71.0 | 41.0 | 76.0 | 73.0 |
| ຊົນນະບົດ | 1.0 | 4.0 | 11.0 | 44.0 | 48.0 | 38.0 | 30.0 | 44.0 |
| ແຂວງ | | | | | | | | |
| ນະຄອນຫຼວງວຽງຈັນ | 15.0 | 24.0 | 65.0 | 80.0 | 69.0 | 48.0 | 86.0 | 86.0 |
| ຜົ້ງສາລີ | 3.0 | 0.0 | 3.0 | 17.0 | 9.0 | 2.0 | 14.0 | 14.0 |
| ຫຼວງນ້ຳທາ | 2.0 | 3.0 | 6.0 | 29.0 | 39.0 | 25.0 | 15.0 | 31.0 |
| ອຸດົມໄຊ | 1.0 | 2.0 | 6.0 | 24.0 | 22.0 | 12.0 | 14.0 | 25.0 |
| ບໍ່ແກ້ວ | 2.0 | 2.0 | 9.0 | 19.0 | 28.0 | 30.0 | 29.0 | 35.0 |
| ຫຼວງພະບາງ | 2.0 | 4.0 | 13.0 | 29.0 | 27.0 | 25.0 | 18.0 | 37.0 |
| ຫົວພັນ | 0.0 | 3.0 | 13.0 | 47.0 | 40.0 | 33.0 | 19.0 | 38.0 |
| ໄຊຍະບູລີ | 4.0 | 9.0 | 20.0 | 50.0 | 56.0 | 46.0 | 39.0 | 57.0 |
| ຊຽງຂວາງ | 2.0 | 6.0 | 18.0 | 46.0 | 46.0 | 31.0 | 24.0 | 40.0 |
| ວຽງຈັນ | 4.0 | 7.0 | 25.0 | 51.0 | 64.0 | 34.0 | 51.0 | 57.0 |
| ບໍລິຄຳໄຊ | 6.0 | 7.0 | 23.0 | 54.0 | 60.0 | 53.0 | 46.0 | 57.0 |
| ຄຳມ່ວນ | 3.0 | 4.0 | 15.0 | 47.0 | 49.0 | 42.0 | 41.0 | 60.0 |
| ສະຫວັນນະເຂດ | 2.0 | 3.0 | 18.0 | 60.0 | 72.0 | 54.0 | 45.0 | 62.0 |
| ສາລະວັນ | 1.0 | 3.0 | 11.0 | 41.0 | 58.0 | 29.0 | 30.0 | 36.0 |
| ເຊກອງ | 0.0 | 2.0 | 6.0 | 46.0 | 35.0 | 33.0 | 21.0 | 26.0 |
| ຈຳປາສັກ | 1.0 | 5.0 | 21.0 | 67.0 | 66.0 | 45.0 | 52.0 | 63.0 |
| ອັດຕະປື | 1.0 | 2.0 | 14.0 | 28.0 | 66.0 | 49.0 | 15.0 | 21.0 |
| ເຂດພິເສດໄຊສົມບູນ | 0.0 | ... | 7.0 | ... | 27.0 | ... | 11.0 | ... |

***ແຫຼ່ງຂໍ້ມູນ:***

***ຖັນທີ 1,3,5,7,9,11,13,15:*** *ຄະນະກຳມະການ ແຜນການ ແລະ ການລົງທຶນ - ສູນສະຖິຕິແຫ່ງຊາດ (2004) "ຄົວເຮືອນ ຂອງ ສປປ ລາວ: ດັດຊະນີໝາຍທາງດ້ານເສດຖະກິດ ແລະ ສັງຄົມ, ການສຳຫຼວດການ ຊົມໃຊ້ ແລະ ໃຊ້ຈ່າຍຂອງຄົວເຮືອນ, 2002/2003 (LESC 3)" (ນະຄອນຫຼວງວຽງຈັນ: 2004.)*

***ຖັນທີ 2,4,6,8,10,12,14,16:*** *ຄະນະກຳມະການ ແຜນການ ແລະ ການລົງທຶນ - ສູນສະຖິຕິແຫ່ງຊາດ (2009) "ຄົວເຮືອນ ຂອງ ສປປ ລາວ: ດັດຊະນີໝາຍທາງດ້ານເສດຖະກິດ ແລະ ສັງຄົມ, ການສຳຫຼວດການຊົມໃຊ້ ແລະ ໃຊ້ຈ່າຍຂອງຄົວເຮືອນ, 2007/2008 (LESC 4)" (ນະຄອນຫຼວງວຽງຈັນ: 2009.)*

## ຕາຕະລາງ 9: ຂໍ້ມູນກ່ຽວກັບຕະຫຼາດ, ຄົມມະນາຄົມ ແລະ ການຂົນສົ່ງ

| | ສັດສ່ວນຂອງຄົວເຮືອນທີ່ມີກຳມະສິດໃນການຄອບຄອງ | | | | | | | |
|---|---|---|---|---|---|---|---|---|
| | ວິທະຍຸ/ເຄື່ອງຫຼິ້ນວີດີໂອ | | ໂທລະສັບມືຖື | | ຕູ້ເຢັນ | | ໝໍ້ຫຸງເຂົ້າໄຟຟ້າ | |
| | ສ່ວນຮ້ອຍ | ສ່ວນຮ້ອຍ | ສ່ວນຮ້ອຍ | ສ່ວນຮ້ອຍ | ສ່ວນຮ້ອຍ | ສ່ວນຮ້ອຍ | ສ່ວນຮ້ອຍ | ສ່ວນຮ້ອຍ |
| | 2002/03 | 2007/08 | 2002/03 | 2007/08 | 2002/03 | 2007/08 | 2002/03 | 2007/08 |
| | 9 | 10 | 11 | 12 | 13 | 14 | 15 | 16 |
| ສປປ ລາວ | 46.0 | 55.0 | 3.0 | 42.0 | 22.0 | 34.0 | 21.0 | 29.0 |
| ຕົວເມືອງ | 53.0 | 62.0 | 10.0 | 65.0 | 59.0 | 61.0 | 58.0 | 58.0 |
| ຊົນນະບົດ | 43.0 | 52.0 | 1.0 | 32.0 | 10.0 | 22.0 | 9.0 | 16.0 |
| ແຂວງ | | | | | | | | |
| ນະຄອນຫຼວງວຽງຈັນ | 53.0 | 73.0 | 14.0 | 81.0 | 77.0 | 82.0 | 74.0 | 79.0 |
| ຜົ້ງສາລີ | 38.0 | 38.0 | 0.0 | 10.0 | 2.0 | 5.0 | 2.0 | 6.0 |
| ຫຼວງນ້ຳທາ | 42.0 | 41.0 | 1.0 | 27.0 | 2.0 | 8.0 | 0.0 | 10.0 |
| ອຸດົມໄຊ | 35.0 | 38.0 | 2.0 | 15.0 | 8.0 | 10.0 | 9.0 | 10.0 |
| ບໍ່ແກ້ວ | 49.0 | 53.0 | 1.0 | 22.0 | 7.0 | 18.0 | 6.0 | 12.0 |
| ຫຼວງພະບາງ | 49.0 | 55.0 | 1.1 | 28.0 | 11.0 | 22.0 | 11.0 | 20.0 |
| ຫົວພັນ | 58.0 | 58.0 | 1.1 | 17.0 | 8.0 | 12.0 | 11.0 | 12.0 |
| ໄຊຍະບູລີ | 54.0 | 60.0 | 1.0 | 39.0 | 10.0 | 30.0 | 8.0 | 25.0 |
| ຊຽງຂວາງ | 53.0 | 48.0 | 0.0 | 30.0 | 1.0 | 10.0 | 1.0 | 17.0 |
| ວຽງຈັນ | 44.0 | 51.0 | 1.0 | 48.0 | 27.0 | 43.0 | 28.0 | 44.0 |
| ບໍລິຄຳໄຊ | 47.0 | 51.0 | 3.0 | 50.0 | 20.0 | 42.0 | 22.0 | 37.0 |
| ຄຳມ່ວນ | 38.0 | 54.0 | 2.0 | 38.0 | 22.0 | 38.0 | 16.0 | 22.0 |
| ສະຫວັນນະເຂດ | 46.0 | 64.0 | 1.0 | 50.0 | 20.0 | 34.0 | 19.0 | 24.0 |
| ສາລະວັນ | 35.0 | 46.0 | 0.0 | 26.0 | 11.0 | 17.0 | 9.0 | 12.0 |
| ເຊກອງ | 34.0 | 45.0 | 1.0 | 15.0 | 8.0 | 13.0 | 7.0 | 10.0 |
| ຈຳປາສັກ | 42.0 | 56.0 | 1.0 | 53.0 | 20.0 | 36.0 | 18.0 | 27.0 |
| ອັດຕະປື | 33.0 | 33.0 | 1.0 | 16.0 | 8.0 | 13.0 | 11.0 | 13.0 |
| ເຂດພິເສດໄຊສົມບູນ | 62.0 | ... | 1.0 | ... | 1.0 | ... | 1.0 | ... |

***ແຫຼ່ງຂໍ້ມູນ:***

***ຖັນທີ 1,3,5,7,9,11,13,15:*** *ຄະນະກຳມະການ ແຜນການ ແລະ ການລົງທຶນ - ສູນສະຖິຕິແຫ່ງຊາດ (2004) "ຄົວເຮືອນ ຂອງ ສປປ ລາວ: ດັດຊະນີໝາຍທາງດ້ານເສດຖະກິດ ແລະ ສັງຄົມ, ການສຳຫຼວດການ ຊົມໃຊ້ ແລະ ໃຊ້ຈ່າຍຂອງຄົວເຮືອນ, 2002/2003 (LESC 3)" (ນະຄອນຫຼວງວຽງຈັນ: 2004.)*

***ຖັນທີ 2,4,6,8,10,12,14,16:*** *ຄະນະກຳມະການ ແຜນການ ແລະ ການລົງທຶນ - ສູນສະຖິຕິແຫ່ງຊາດ (2009) "ຄົວເຮືອນ ຂອງ ສປປ ລາວ: ດັດຊະນີໝາຍທາງດ້ານເສດຖະກິດ ແລະ ສັງຄົມ, ການສຳຫຼວດການຊົມໃຊ້ ແລະ ໃຊ້ຈ່າຍຂອງຄົວເຮືອນ, 2007/2008 (LESC 4)" (ນະຄອນຫຼວງວຽງຈັນ: 2009.)*

## ຕາຕະລາງ 10: ລວມຍອດຜະລິດຕະພັນພາຍໃນ ແລະ ຂໍ້ມູນທີ່ກ່ຽວຂ້ອງ

| ລຳດັບ ແຖວ | ດັດຊະນີໝາຍ | ຫົວໜ່ວຍ | 1990 | 1991 | 1995 | 2000 | 2001 |
|---|---|---|---|---|---|---|---|
| 1 | **ລວມຍອດຜະລິດຕະພັນພາຍໃນ (GDP)** | | | | | | |
| 2 | ມູນຄ່າ GDP ໃນນາມ (ລາຄາປະຈຸບັນ) | ພັນລ້ານກີບ | 613 .0 | 722.0 | 1430.0 | 13,669.0 | 15,702.0 |
| 3 | ມູນຄ່າ GDP ຕົວຈິງ (ລາຄາຄົງທີ່ປີ 1990) | ພັນລ້ານກີບ | 613 .0 | 637.0 | 836.0 | 1,127.0 | 1,192 .0 |
| 4 | ອັດຕາການຂະຫຍາຍຕົວຕໍ່ປີຂອງ GDP ຕົວຈິງ | ສ່ວນຮ້ອຍ | ... | 4.0 | 7.1 | 5.8 | 5.8 |
| 5 | ມູນຄ່າ GDP (ລາຄາປະຈຸບັນ) ຄິດເປັນໂດລາສະຫະລັດ | ລ້ານໂດລາ | 858.8 | 1,028.0 | 1,747.0 | 1,742.0 | 1,770.0 |
| 6 | GDP ຕໍ່ຫົວຄົນ ຄິດເປັນໂດລາສະຫະລັດ | ໂດລາ | 207 .0 | 242.0 | 379.0 | 335.0 | 329.0 |
| 7 | ອັດຕາການຂະຫຍາຍຕົວຕໍ່ປີຂອງ GDP ຕໍ່ຫົວຄົນ | ສ່ວນຮ້ອຍ | ... | 16.6 | 12.4 | 17.4 | -1.8 |
| 8 | **ສັດສ່ວນຂອງ GDP ແບ່ງຕາມຂະແໜງການ** | | | | | | |
| 9 | ກະສິກຳ | ສ່ວນຮ້ອຍ | 60.7 | 57.4 | 53.7 | 52.1 | 50.8 |
| 10 | ອຸດສາຫະກຳ | ສ່ວນຮ້ອຍ | 14.4 | 16.6 | 18.5 | 22.7 | 23.5 |
| 11 | ບໍລິການ | ສ່ວນຮ້ອຍ | 24.1 | 24.6 | 25.3 | 24.4 | 24.8 |
| 12 | ອັດຕາການຂະຫຍາຍຕົວຕໍ່ປີຂອງ GDP ແບ່ງຕາມຂະແໜງການ | | | | | | |
| 13 | ກະສິກຳ | ສ່ວນຮ້ອຍ | 4.1 | -1.7 | 3.1 | 4.9 | 3.8 |
| 14 | ອຸດສາຫະກຳ | ສ່ວນຮ້ອຍ | 12.3 | 19.9 | 13.3 | 8.5 | 10.1 |
| 15 | ບໍລິການ | ສ່ວນຮ້ອຍ | 6.8 | 6.5 | 10.2 | 4.9 | 5.7 |
| 16 | **ສະເລ່ຍການປ່ຽນແປງຕໍ່ປີຂອງດັດຊະນີລາຄາການຊົມໃຊ້** | | | | | | |
| 17 | ອັດຕາການປ່ຽນແປງຂອງດັດຊະນີລາຄາການຊົມໃຊ້ ສະເລ່ຍ ຕໍ່ປີ (CPI) | ສ່ວນຮ້ອຍ | 35.9 | 13.2 | 19.6 | 23.1 | 7.8 |
| 18 | **ບໍລິມາດເງິນ (M2)** | | | | | | |
| 19 | ບໍລິມາດເງິນ (M2) ໃນທ້າຍປີ | ພັນລ້ານກີບ | ... | ... | ... | 2,253.0 | 2705.0 |
| 20 | ອັດຕາການຂະຫຍາຍຕົວຂອງບໍລິມາດເງິນ (M2) | ສ່ວນຮ້ອຍ | ... | ... | ... | ... | 20.0 |
| 21 | **ອັດຕາແລກປ່ຽນສະເລ່ຍ** | | 724.8 | 710.0 | 834.2 | 7,935.0 | 8,937.8 |
| 22 | ອັດຕາແລກປ່ຽນທາງການໃນທະນາຄານທຸລະກິດ | | | | | | |
| 23 | -ອັດຕາຊື້ | (ກີບ/ໂດລາ) | 703.0 | 702.0 | 816.0 | 7,811.0 | 8,838.0 |
| 24 | -ອັດຕາຂາຍ | (ກີບ/ໂດລາ) | 736.0 | 703.0 | 821.0 | 7,885.0 | 8,904.0 |
| 25 | -ອັດຕາສະເລ່ຍ | (ກີບ/ໂດລາ) | 720 .0 | 703.0 | 819.0 | 7,848.0 | 8,871.0 |
| 26 | ອັດຕາແລກປ່ຽນຢູ່ໃນຕະຫຼາດ | | | | | | |
| 27 | -ອັດຕາຊື້ | (ກີບ/ໂດລາ) | 725 .0 | 714.0 | 841.0 | 7,979.0 | 8,960.0 |
| 28 | -ອັດຕາຂາຍ | (ກີບ/ໂດລາ) | 735 .0 | 721.0 | 858.0 | 8,065.0 | 9,049.0 |
| 29 | -ອັດຕາສະເລ່ຍ | (ກີບ/ໂດລາ) | 730 .0 | 718.0 | 850.0 | 8,022.0 | 9,004.0 |
| 30 | **ແຜນການລົງທຶນໂດຍກົງຂອງຕ່າງປະເທດ** | ລ້ານໂດລາ | 860.5 | 55.3 | 108.9 | 37.2 | 54.1 |
| 31 | **ການຊ່ວຍເຫຼືອຈາກຕ່າງປະເທດ (ODA)** | ລ້ານໂດລາ | ... | 130.6 | 203.2 | 202.6 | 127.2 |

***ແຫຼ່ງຂໍ້ມູນ:***

***ແຖວທ1-17 ແລະ 30 :*** *ຄະນະກຳມະການ ແຜນການ ແລະ ການລົງທຶນ – ສູນສະຖິຕິແຫ່ງຊາດ (2005) "ວາລະສານສະຖິຕິປະຈຳປີ 1975-2005" (ນະຄອນຫຼວງວຽງຈັນ: 2005)*

***ແຖວທີ 18-19, ແລະ 21-39:*** *ທະນາຄານ ແຫ່ງ ສປປ ລາວ (2005) "ດຸນການຊຳລະສະສາງ" (ນະຄອນຫຼວງວຽງຈັນ: 2005).*

***ແຖວທີ 20-29:*** *ການຄິດໄລ່ໂດຍອີງໃສ່ຂໍ້ມູນທີ່ໄດ້ ຈາກ ກົມຄົ້ນຄວ້າ, ທະນາຄານແຫ່ງ ສປປ ລາວ (2005)*

***ແຖວທີ 30:*** *ຜທ, ກົມສົ່ງເສີມການລົງທຶນ*

***ແຖວທີ 31:*** *ກົມຮ່ວມມືສາກົນ*

## ຕາຕະລາງ 10: ລວມຍອດຜະລິດຕະພັນພາຍໃນ ແລະ ຂໍ້ມູນທີ່ກ່ຽວຂ້ອງ

| ລຳດັບ ແຖວ | ດັດຊະນີພາຍ | ຫົວໜ່ວຍ | 2002 | 2003 | 2004 | 2005 | 2006 | 2007 |
|---|---|---|---|---|---|---|---|---|
| 1 | **ລວມຍອດຜະລິດຕະພັນພາຍໃນ (GDP)** | | | | | | | |
| 2 | ມູນຄ່າ GDP ໃນນາມ (ລາຄາປະຈຸບັນ) | ພັນລ້ານກີບ | 18,401.0 | 22,503.0 | 26,590.0 | 30,594.0 | 33,782.0 | 39,492.0 |
| 3 | ມູນຄ່າ GDP ຕົວຈິງ (ລາຄາຄົງທີ່ປີ 1990) | ພັນລ້ານກີບ | 1,263.0 | 1,335.0 | 1,427.0 | 1,531.0 | 21,264.0 | 22,944.0 |
| 4 | ອັດຕາການຂະຫຍາຍຕົວຕໍ່ປີຂອງ GDP ຕົວຈິງ | ສ່ວນຮ້ອຍ | 5.9 | 5.7 | 6.9 | 7.3 | 8.3 | 7.9 |
| 5 | ມູນຄ່າ GDP (ລາຄາປະຈຸບັນ) ຄິດເປັນໂດລາສະຫະລັດ | ລ້ານໂດລາ | 1,830.0 | 2,129.0 | 2,498.0 | 2,867.0 | 3,481.0 | 4,189 |
| 6 | GDP ຕໍ່ຫົວຄົນ ຄິດເປັນໂດລາສະຫະລັດ | ໂດລາ | 331.0 | 375.0 | 428.0 | 510.0 | 580.0 | 701.0 |
| 7 | ອັດຕາການຂະຫຍາຍຕົວຕໍ່ປີຂອງ GDP ຕໍ່ຫົວຄົນ | ສ່ວນຮ້ອຍ | 0.6 | 13.2 | 13.2 | 19.2 | 13.7 | 20.9 |
| 8 | **ສັດສ່ວນຂອງ GDP ແບ່ງຕາມຂະແໜງການ** | | | | | | | |
| 9 | ກະສິກຳ | ສ່ວນຮ້ອຍ | 49.9 | 48.1 | 46.6 | 44.4 | 31.1 | 30.8 |
| 10 | ອຸດສາຫະກຳ | ສ່ວນຮ້ອຍ | 24.4 | 25.7 | 27.0 | 29.2 | 27.8 | 26.0 |
| 11 | ບໍລິການ | ສ່ວນຮ້ອຍ | 24.7 | 25.2 | 25.5 | 25.5 | 35.6 | 38.4 |
| 12 | ອັດຕາການຂະຫຍາຍຕົວຕໍ່ປີຂອງ GDP ແບ່ງຕາມຂະແໜງການ | | | | | | | |
| 13 | ກະສິກຳ | ສ່ວນຮ້ອຍ | 4.0 | 2.2 | 3.5 | 2.5 | 3.5 | 6.2 |
| 14 | ອຸດສາຫະກຳ | ສ່ວນຮ້ອຍ | 10.1 | 11.7 | 12.4 | 15.9 | 21.5 | 6.5 |
| 15 | ບໍລິການ | ສ່ວນຮ້ອຍ | 5.7 | 7.3 | 7.5 | 6.7 | 5.3 | 12.1 |
| 16 | **ສະເລ່ຍການປ່ຽນແປງຕໍ່ປີຂອງດັດຊະນີລາຄາການຊົມໃຊ້** | | | | | | | |
| 17 | ອັດຕາການປ່ຽນແປງຂອງດັດຊະນີລາຄາການຊົມໃຊ້ ສະເລ່ຍ ຕໍ່ປີ (CPI) | ສ່ວນຮ້ອຍ | 10.7 | 15.5 | 10.5 | 7.2 | 6.8 | 4.5 |
| 18 | **ບໍລິມາດເງິນ (M2)** | | | | | | | |
| 19 | ບໍລິມາດເງິນ (M2) ໃນທ້າຍປີ | ພັນລ້ານກີບ | 3,435.0 | 4,095.0 | 5,000.0 | 5,416.0 | 7,046.0 | 9,774.0 |
| 20 | ອັດຕາການຂະຫຍາຍຕົວຂອງບໍລິມາດເງິນ (M2) | ສ່ວນຮ້ອຍ | 27.0 | 19.0 | 22.0 | 8.0 | 30.0 | 39.0 |
| 21 | **ອັດຕາແລກປ່ຽນສະເລ່ຍ** | | 10,111.2 | 10,609.4 | 10,644.0 | 10,672.7 | 9,703.9 | 9,428.1 |
| 22 | ອັດຕາແລກປ່ຽນທາງການໃນທະນາຄານທຸລະກິດ | | | | | | | |
| 23 | -ອັດຕາຊື້ | (ກີບ/ໂດລາ) | 10,000.0 | 10,515.0 | 10,580.0 | 10,620.0 | 9,654.0 | 9,385.0 |
| 24 | -ອັດຕາຂາຍ | (ກີບ/ໂດລາ) | 10,112.0 | 10,622.0 | 10,644.0 | 10,687.0 | 9,739.0 | 9,414.0 |
| 25 | -ອັດຕາສະເລ່ຍ | (ກີບ/ໂດລາ) | 10,056.0 | 10,569.0 | 10,612.0 | 10,656.0 | 9,697.0 | 9,399.0 |
| 26 | ອັດຕາແລກປ່ຽນຢູ່ໃນຕະຫຼາດ | | | | | | | |
| 27 | -ອັດຕາຊື້ | (ກີບ/ໂດລາ) | 10,114.0 | 10,598.0 | 10,630.0 | 10,649.0 | 9,659.0 | 9,425.0 |
| 28 | -ອັດຕາຂາຍ | (ກີບ/ໂດລາ) | 10,219.0 | 10,702.0 | 10,720.0 | 10,731.0 | 9,764.0 | 9,489.0 |
| 29 | -ອັດຕາສະເລ່ຍ | (ກີບ/ໂດລາ) | 10,166.0 | 10,650.0 | 10,676.0 | 10,690.0 | 9,711.0 | 9,457.0 |
| 30 | **ແຜນການລົງທຶນໂດຍກົງຂອງຕ່າງປະເທດ** | ລ້ານໂດລາ | 133.0 | 466.0 | 533.1 | 1,245.3 | 2,699.7 | 116.9 |
| 31 | **ການຊ່ວຍເຫຼືອຈາກຕ່າງປະເທດ (ODA)** | ລ້ານໂດລາ | 143.7 | 162.0 | 183.0 | 186.3 | 230.4 | ... |

***ແຫຼ່ງຂໍ້ມູນ:***

***ແຖວທ1-17 ແລະ 30 :*** *ຄະນະກຳມະການ ແຜນການ ແລະ ການລົງທຶນ – ສູນສະຖິຕິແຫ່ງຊາດ (2005) "ວາລະສານສະຖິຕິປະຈຳປີ 1975-2005" (ນະຄອນຫຼວງວຽງຈັນ: 2005)*

***ແຖວທີ 18-19, ແລະ 21-39:*** *ທະນາຄານ ແຫ່ງ ສປປ ລາວ (2005) "ດູນການຊຳລະສະສາງ" (ນະຄອນຫຼວງວຽງຈັນ: 2005).*

***ແຖວທີ 20-29:*** *ການຄິດໄລ່ໂດຍອີງໃສ່ຂໍ້ມູນທີ່ໄດ້ ຈາກ ກົມຄົ້ນຄວ້າ, ທະນາຄານແຫ່ງ ສປປ ລາວ (2005)*

***ແຖວທີ 30:*** *ຜທ, ກົມສົ່ງເສີມການລົງທຶນ*

***ແຖວທີ 31:*** *ກົມຮ່ວມມືສາກົນ*

# ເອກະສານຊ້ອນທ້າຍ III:

## ຂໍ້ມູນດ້ານແຮງງານ

ຕາຕະລາງ 11: ອັດຕາສ່ວນການມີສ່ວນຮ່ວມໃນການເຮັດວຽກ 246
ຕາຕະລາງ 12: ກິດຈະກຳຂອງຜູ້ອອກແຮງງານແບ່ງຕາມຂະແໜງການຫຼັກ 247
ຕາຕະລາງ 13: ກິດຈະກຳຂອງຜູ້ອອກແຮງງານແບ່ງຕາມສະຖານະພາບຫຼັກໃນການເຮັດວຽກ 248
ຕາຕະລາງ 14: ຂໍ້ມູນດ້ານຕະຫຼາດແຮງງານ 249
ຕາຕະລາງ 15: ກິດຈະກຳທາງເສດຖະກິດຂອງຜູ້ອອກແຮງງານ 251
ຕາຕະລາງ 16: ໂຄງປະກອບຫົວໜ່ວຍເສດຖະກິດພື້ນຖານຕາມແຕ່ລະຂະແໜງ ແບ່ງຕາມຮູບການຈັດຕັ້ງ ເສດຖະກິດ 254
ຕາຕະລາງ 17: ຈຳນວນແຮງງານ, ແຮງງານສະເລ່ຍ ແລະ ໂຄງປະກອບແຮງງານແບ່ງຕາມຂະແໜງການ ເສດຖະກິດ 256



## ຕາຕະລາງ 11: ອັດຕາສ່ວນການມີສ່ວນຮ່ວມໃນການເຮັດວຽກ

| | ອັດຕາສ່ວນການເຮັດວຽກເສດຖະກິດ (ສຳລັບພົນລະເມືອງທີ່ມີອາຍຸ 10 ປີຂຶ້ນໄປ) | | | | | |
|---|---|---|---|---|---|---|
| | ລວມ | | ຊາຍ | | ຍິງ | |
| | ສ່ວນຮ້ອຍ | ສ່ວນຮ້ອຍ | ສ່ວນຮ້ອຍ | ສ່ວນຮ້ອຍ | ສ່ວນຮ້ອຍ | ສ່ວນຮ້ອຍ |
| | 1995 | 2005 | 1995 | 2005 | 1995 | 2005 |
| | 1 | 2 | 3 | 4 | 5 | 6 |
| ສປປ ລາວ | 70.3 | 66.6 | 69.5 | 66.8 | 71.2 | 66.3 |
| ແຂວງ | | | | | | |
| ນະຄອນຫຼວງວຽງຈັນ | 59.6 | 59.3 | 61.9 | 63.2 | 57.2 | 55.5 |
| ຜົ້ງສາລີ | 76.3 | 69.0 | 76.4 | 69.0 | 76.2 | 69.0 |
| ຫຼວງນ້ຳທາ | 76.4 | 66.2 | 76.2 | 66.0 | 76.6 | 66.3 |
| ອຸດົມໄຊ | 76.9 | 67.8 | 75.3 | 66.8 | 78.4 | 68.8 |
| ບໍ່ແກ້ວ | 77.3 | 65.3 | 76.3 | 66.3 | 78.4 | 64.4 |
| ຫຼວງພະບາງ | 69.6 | 65.9 | 67.2 | 64.4 | 71.9 | 67.4 |
| ຫົວພັນ | 72.3 | 64.2 | 70.0 | 62.7 | 74.6 | 65.7 |
| ໄຊຍະບູລີ | 68.2 | 69.3 | 67.9 | 68.9 | 68.5 | 69.9 |
| ຊຽງຂວາງ | 65.9 | 60.2 | 63.3 | 59.0 | 68.5 | 61.4 |
| ວຽງຈັນ | 62.2 | 63.1 | 62.7 | 64.7 | 61.6 | 61.5 |
| ບໍລິຄຳໄຊ | 69.5 | 64.3 | 68.8 | 64.3 | 70.2 | 64.4 |
| ຄຳມ່ວນ | 75.1 | 69.1 | 73.5 | 68.9 | 76.6 | 69.3 |
| ສະຫວັນນະເຂດ | 73.7 | 71.1 | 73.1 | 71.7 | 74.2 | 70.6 |
| ສາລະວັນ | 79.4 | 73.2 | 77.1 | 71.3 | 81.5 | 75.0 |
| ເຊກອງ | 82.1 | 70.3 | 81.9 | 70.1 | 82.4 | 70.5 |
| ຈຳປາສັກ | 69.3 | 68.6 | 67.2 | 68.0 | 71.2 | 69.1 |
| ອັດຕະປື | 72.4 | 69.5 | 71.0 | 69.1 | 73.6 | 69.9 |
| ເຂດພິເສດໄຊສົມບູນ | 71.3 | 63.1 | 69.3 | 65.6 | 73.5 | 60.2 |

***ແຫຼ່ງຂໍ້ມູນ:***
***ຖັນທີ 1, 3, 5:*** *ກະຊວງ ແຜນການ ແລະ ການລົງທຶນ – ສູນສະຖິຕິແຫ່ງຊາດ (1995) "ການສຳຫຼວດພົນລະ ເມືອງ ປີ 1995"*
***ຖັນທີ 2, 4, 6:*** *ກະຊວງ ແຜນການ ແລະ ການລົງທຶນ – ສູນສະຖິຕິແຫ່ງຊາດ (2005) "ການສຳຫຼວດພົນລະ ເມືອງ ປີ 2005"*

## ຕາຕະລາງ 12: ກິດຈະກຳຂອງຜູ້ອອກແຮງງານແບ່ງຕາມຂະແໜງການຫຼັກ

| | ອັດຕາສ່ວນຂອງພົນລະເມືອງເຮັດວຽກກະສິກຳ | | ອັດຕາສ່ວນຂອງພົນລະເມືອງ ເຮັດວຽກນອກຂະແໜງກະສິກຳ | |
|---|---|---|---|---|
| | ຊາຍ | ຍິງ | ຊາຍ | ຍິງ |
| | ສ່ວນຮ້ອຍ | | ສ່ວນຮ້ອຍ | |
| | 2005 | 2005 | 2005 | 2005 |
| | 1 | 2 | 3 | 4 |
| ສປປ ລາວ | 75.7 | 81.3 | 24.3 | 18.7 |
| ແຂວງ | | | | |
| ນະຄອນຫຼວງວຽງຈັນ | 34.0 | 36.9 | 66.1 | 63.1 |
| ຜົ້ງສາລີ | 89.4 | 91.1 | 10.6 | 8.9 |
| ຫຼວງນ້ຳທາ | 83.4 | 89.5 | 16.6 | 10.5 |
| ອຸດົມໄຊ | 85 | 90.5 | 15.1 | 9.5 |
| ບໍ່ແກ້ວ | 82.2 | 87.1 | 17.9 | 12.9 |
| ຫຼວງພະບາງ | 79.8 | 83.6 | 20.2 | 16.5 |
| ຫົວພັນ | 87.4 | 90.3 | 12.5 | 9.7 |
| ໄຊຍະບູລີ | 83.4 | 89 | 16.6 | 10.9 |
| ຊຽງຂວາງ | 78.3 | 84.2 | 21.7 | 15.6 |
| ວຽງຈັນ | 70.2 | 76.8 | 29.7 | 23.3 |
| ບໍລິຄຳໄຊ | 77.6 | 84.7 | 22.5 | 15.3 |
| ຄຳມ່ວນ | 80.5 | 86.2 | 19.4 | 13.7 |
| ສະຫວັນນະເຂດ | 85.2 | 88.7 | 14.8 | 11.2 |
| ສາລະວັນ | 91.1 | 94.1 | 8.9 | 5.8 |
| ເຊກອງ | 81.6 | 88.9 | 18.3 | 11.0 |
| ຈຳປາສັກ | 77.7 | 83 | 22.3 | 17.0 |
| ອັດຕະປື | 81.5 | 89.4 | 18.5 | 10.6 |
| ເຂດພິເສດໄຊສົມບູນ | 61.5 | 86.5 | 38.5 | 13.5 |

***ແຫຼ່ງຂໍ້ມູນ:***
*ກະຊວງ ແຜນການ ແລະ ການລົງທຶນ – ສູນສະຖິຕິແຫ່ງຊາດ (2005) "ການສຳຫຼວດພົນລະເມືອງ ແລະ ທີ່ຢູ່ອາໄສ, 2005"*

## ຕາຕະລາງ 13: ກິດຈະກຳຂອງຜູ້ອອກແຮງງານແບ່ງຕາມສະຖານະພາບຫຼັກໃນການເຮັດວຽກ

| | ກິດຈະກຳທາງເສດຖະກິດຕົ້ນຕໍທີ່ໄດ້ເຮັດໃນ 7 ວັນຜ່ານມາ (ອັດຕາສ່ວນຂອງຊົ່ວໂມງໃນການເຮັດວຽກທັງໝົດ) | | | | | |
|---|---|---|---|---|---|---|
| | | | ເຮັດວຽກໃຫ້ຕົນເອງ | | | |
| | ແຮງງານທີ່ໄດ້ຮັບຄ່າຈ້າງ | | ກິດຈະກຳນອກກະສິກຳ | | ເຮັດກະສິກຳຂອງຕົນເອງ | |
| | 2002/03 | 2007/08 | 2002/03 | 2007/08 | 2002/03 | 2007/08 |
| | 1 | 2 | 3 | 4 | 5 | 6 |
| ສປປ ລາວ | 6.0 | 14.0 | 24.0 | 20.0 | 71.0 | 66.0 |
| ຕົວເມືອງ | 17.0 | 27.0 | 49.0 | 35.0 | 34.0 | 38.0 |
| ຊົນນະບົດມີເສັ້ນທາງເຂົ້າເຖິງ | 3.0 | 9.0 | 16.0 | 15.0 | 81.0 | 76.0 |
| ຊົນນະບົດບໍ່ມີເສັ້ນທາງເຂົ້າເຖິງ | 1.0 | 7.0 | 11.0 | 11.0 | 88.0 | 82.0 |
| ແຂວງ | | | | | | |
| ນະຄອນຫຼວງວຽງຈັນ | 22.0 | 32.0 | 47.0 | 40.0 | 31.0 | 27.0 |
| ຜົ້ງສາລີ | 0.0 | 9.0 | 7.0 | 15.0 | 92.0 | 77.0 |
| ຫຼວງນໍ້າທາ | 3.0 | 14.0 | 15.0 | 22.0 | 82.0 | 64.0 |
| ອຸດົມໄຊ | 3.0 | 8.0 | 3.0 | 7.0 | 94.0 | 84.0 |
| ບໍ່ແກ້ວ | 1.0 | 8.0 | 15.0 | 8.0 | 84.0 | 84.0 |
| ຫຼວງພະບາງ | 5.0 | 13.0 | 12.0 | 19.0 | 84.0 | 68.0 |
| ຫົວພັນ | 1.0 | 5.0 | 18.0 | 9.0 | 81.0 | 86.0 |
| ໄຊຍະບູລີ | 5.0 | 15.0 | 19.0 | 22.0 | 76.0 | 63.0 |
| ຊຽງຂວາງ | 2.0 | 7.0 | 16.0 | 17.0 | 82.0 | 76.0 |
| ວຽງຈັນ | 5.0 | 14.0 | 26.0 | 25.0 | 69.0 | 61.0 |
| ບໍລິຄຳໄຊ | 3.0 | 13.0 | 34.0 | 21.0 | 63.0 | 66.0 |
| ຄຳມ່ວນ | 3.0 | 10.0 | 21.0 | 15.0 | 76.0 | 75.0 |
| ສະຫວັນນະເຂດ | 5.0 | 17.0 | 22.0 | 20.0 | 73.0 | 64.0 |
| ສາລະວັນ | 0.0 | 3.0 | 11.0 | 9.0 | 88.0 | 88.0 |
| ເຊກອງ | 3.0 | 14.0 | 14.0 | 10.0 | 83.0 | 76.0 |
| ຈຳປາສັກ | 5.0 | 11.0 | 32.0 | 24.0 | 63.0 | 65.0 |
| ອັດຕະປື | 2.0 | 11.0 | 30.0 | 19.0 | 68.0 | 70.0 |
| ເຂດພິເສດໄຊສົມບູນ | 5.0 | ... | 15.0 | ... | 80.0 | ... |

***ແຫຼ່ງຂໍ້ມູນ:***

***ຖັນທີ 1, 3, 5:*** *ຖັນທີ 1,3,5: ຄະນະກຳມະການ ແຜນການ ແລະ ການລົງທຶນ - ສູນສະຖິຕິແຫ່ງຊາດ (2004) “ຄົວ ເຮືອນ ຂອງ ສປປ ລາວ: ດັດຊະນີໝາຍທາງດ້ານເສດ ຖະກິດ ແລະ ສັງຄົມ, ການສຳຫຼວດການ ຊົມໃຊ້ ແລະ ໃຊ້ຈ່າຍ ຂອງຄົວເຮືອນ, 2002/2003 (LESC 3)” (ນະຄອນຫຼວງວຽງຈັນ: 2004.)*

***ຖັນທີ  2, 4, 6:*** *ຄະນະກຳມະການ ແຜນການ ແລະ ການລົງທຶນ - ສູນສະຖິຕິແຫ່ງຊາດ (2009) “ຄົວ ເຮືອນ ຂອງ ສປປ ລາວ: ດັດຊະນີໝາຍທາງດ້ານເສດ ຖະກິດ ແລະ ສັງຄົມ, ການສຳຫຼວດ ການຊົມ ໃຊ້ ແລະ ໃຊ້ຈ່າຍຂອງຄົວເຮືອນ, 2007/2008 (LESC 4)” (ນະຄອນຫຼວງວຽງຈັນ: 2009.)*

## ຕາຕະລາງ 14: ຂໍ້ມູນດ້ານຕະຫຼາດແຮງງານ

| | ສະເລ່ຍຈຳນວນ ເດືອນທີ່ຫວ່າງງານຂອງພົນລະເມືອງ ອາຍຸແຕ່ 10 ຂຶ້ນໄປ | ສະເລ່ຍຈຳນວນເດືອນທີ່ເຮັດວຽກກະສິກຳ ແລະ ວຽກນອກກະສິກຳ ຂອງພົນລະເມືອງ ອາຍຸແຕ່ 10 ປີ ຂຶ້ນໄປ | | ສະເລ່ຍຈຳນວນເດືອນທີ່ເຮັດວຽກ ກະສິກຳ ແລະ ບາງເດືອນທີ່ຫວ່າງງານ ຂອງພົນລະເມືອງ ອາຍຸແຕ່ 10 ປີ ຂຶ້ນໄປ | |
|---|---|---|---|---|---|
| | | ວຽກກະສິກຳ | ວຽກນອກກະສິກຳ | ວຽກກະສິກຳ | ຫວ່າງ ງານ |
| | ຈຳນວນເດືອນ | ຈຳນວນເດືອນ | ຈຳນວນເດືອນ | ຈຳນວນເດືອນ | ຈຳນວນເດືອນ |
| | 2007/08 | 2007/08 | 2007/08 | 2007/08 | 2007/08 |
| | 1 | 2 | 3 | 4 | 5 |
| ສປປ ລາວ | | | | | |
| ຕົວເມືອງ | 3.9 | 5.4 | 5.5 | 5.7 | 3.2 |
| ຊົນນະບົດມີເສັ້ນທາງເຂົ້າເຖິງ | 3.2 | 6.5 | 4.2 | 7.6 | 3.0 |
| ຊົນນະບົດບໍ່ມີເສັ້ນທາງເຂົ້າເຖິງ | 2.3 | 7.0 | 3.8 | 8.1 | 2.3 |
| ແຂວງ | | | | | |
| ນະຄອນຫຼວງວຽງຈັນ | 4.4 | 4.6 | 6.3 | 5.3 | 4.4 |
| ຜົ້ງສາລີ | 2.7 | 7.7 | 3.4 | 8.5 | 2.2 |
| ຫຼວງນ້ຳທາ | 2.5 | 7.0 | 4.2 | 8.2 | 2.5 |
| ອຸດົມໄຊ | 2.6 | 7.3 | 3.4 | 7.8 | 2.4 |
| ບໍ່ແກ້ວ | 5.5 | 7.2 | 3.9 | 6.3 | 4.8 |
| ຫຼວງພະບາງ | 2.5 | 6.5 | 5.0 | 9.0 | 2.3 |
| ຫົວພັນ | 2.5 | 7.6 | 2.7 | 8.5 | 2.5 |
| ໄຊຍະບູລີ | 3.2 | 6.6 | 4.2 | 6.6 | 3.1 |
| ຊຽງຂວາງ | 2.9 | 5.4 | 4.1 | 8.3 | 2.7 |
| ວຽງຈັນ | 2.7 | 5.3 | 5.4 | 7.0 | 2.5 |
| ບໍລິຄຳໄຊ | 3.8 | 5.5 | 5.4 | 7.0 | 2.8 |
| ຄຳມ່ວນ | 5.6 | 6.9 | 4.9 | 7.0 | 4.6 |
| ສະຫວັນນະເຂດ | 3.7 | 5.9 | 5.1 | 7.4 | 3.6 |
| ສາລະວັນ | 4.0 | 7.1 | 3.8 | 7.2 | 3.9 |
| ເຊກອງ | 2.3 | 7.3 | 3.7 | 7.3 | 2.2 |
| ຈຳປາສັກ | 3.1 | 6.2 | 4.4 | 7.1 | 2.8 |
| ອັດຕະປື | 3.7 | 6.6 | 5.3 | 7.0 | 4.8 |

***ແຫຼ່ງຂໍ້ມູນ:***
***ຖັນທີ 1-5:*** *ຜທ-ສຖຕ (2009), ການສຳຫຼວດການຊົມໃຊ້ ແລະ ໃຊ້ຈ່າຍຂອງຄົວເຮືອນ, 2007/08*

## ຕາຕະລາງ 14: ຂໍ້ມູນດ້ານຕະຫຼາດແຮງງານ

| | ເປີເຊັນຂອງພົນລະເມືອງທີ່ເຈັບປ່ວຍເປັນເວລາ ຍາວນານ ຫຼື ພິການ | | | | ເປີເຊັນຂອງພົນລະເມືອງທີ່ເຈັບຊົ່ວຄາວ ໃນໄລຍະ 4 ອາທິດທີ່ຜ່ານມາ ຊຶ່ງບໍ່ສາມາດເຮັດວຽກ ແລະ ກິດຈະກຳອື່ນໆໄດ້ | | | |
|---|---|---|---|---|---|---|---|---|
| | ຊາຍ | | ຍິງ | | ຊາຍ | | ຍິງ | |
| | ສ່ວນຮ້ອຍ | ສ່ວນຮ້ອຍ | ສ່ວນຮ້ອຍ | ສ່ວນຮ້ອຍ | ສ່ວນຮ້ອຍ | ສ່ວນຮ້ອຍ | ສ່ວນຮ້ອຍ | ສ່ວນຮ້ອຍ |
| | 2002/03 | 2007/08 | 2002/03 | 2007/08 | 2002/03 | 2007/08 | 2002/03 | 2007/08 |
| | 1 | 2 | 3 | 4 | 5 | 6 | 7 | 8 |
| ສປປ ລາວ | 5.2 | 2.4 | 5.0 | 2.3 | 56.0 | 45.0 | 57.0 | 47.0 |
| ຕົວເມືອງ | 4.5 | 2.1 | 4.7 | 2.0 | 43.0 | 40.0 | 42.0 | 41.0 |
| ຊົນນະບົດມີເສັ້ນທາງເຂົ້າເຖິງ | 5.7 | 2.3 | 5.4 | 2.2 | 58.0 | 46.0 | 59.0 | 48.0 |
| ຊົນນະບົດບໍ່ມີເສັ້ນທາງເຂົ້າເຖິງ | 4.7 | 3.4 | 4.2 | 3.3 | 62.0 | 48.0 | 65.0 | 50.0 |
| ແຂວງ | | | | | | | | |
| ນະຄອນຫຼວງວຽງຈັນ | 3.8 | 2.0 | 4.5 | 1.8 | 33.0 | 43.0 | 34.0 | 42.0 |
| ຜົ້ງສາລີ | 4.9 | 2.6 | 4.2 | 2.0 | 75.0 | 50.0 | 70.0 | 56.0 |
| ຫຼວງນ້ຳທາ | 6.5 | 1.2 | 4.1 | 1.3 | 60.0 | 37.0 | 64.0 | 35.0 |
| ອຸດົມໄຊ | 6.1 | 2.9 | 3.8 | 3.1 | 62.0 | 49.0 | 69.0 | 61.0 |
| ບໍ່ແກ້ວ | 1.0 | 1.3 | 0.7 | 2.1 | 8.0 | 28.0 | 4.0 | 25.0 |
| ຫຼວງພະບາງ | 6.2 | 3.2 | 5.5 | 3.4 | 70.0 | 54.0 | 67.0 | 55.0 |
| ຫົວພັນ | 4.3 | 2.0 | 3.6 | 1.8 | 47.0 | 72.0 | 44.0 | 66.0 |
| ໄຊຍະບູລີ | 2.9 | 2.2 | 2.7 | 2.2 | 52.0 | 38.0 | 42.0 | 37.0 |
| ຊຽງຂວາງ | 5.0 | 3.2 | 3.8 | 2.8 | 59.0 | 35.0 | 66.0 | 47.0 |
| ວຽງຈັນ | 3.6 | 0.9 | 2.7 | 0.5 | 56.0 | 38.0 | 60.0 | 41.0 |
| ບໍລິຄຳໄຊ | 2.8 | 1.2 | 3.2 | 1.2 | 45.0 | 33.0 | 55.0 | 32.0 |
| ຄຳມ່ວນ | 7.2 | 1.3 | 6.9 | 1.2 | 57.0 | 42.0 | 55.0 | 48.0 |
| ສະຫວັນນະເຂດ | 5.3 | 1.4 | 4.9 | 1.5 | 57.0 | 50.0 | 57.0 | 48.0 |
| ສາລະວັນ | 7.3 | 4.5 | 7.0 | 3.3 | 63.0 | 37.0 | 64.0 | 41.0 |
| ເຊກອງ | 6.2 | 5.2 | 6.6 | 4.6 | 78.0 | 57.0 | 85.0 | 66.0 |
| ຈຳປາສັກ | 8.2 | 3.6 | 9.4 | 5.3 | 64.0 | 49.0 | 69.0 | 48.0 |
| ອັດຕະປື | 2.6 | 2.3 | 3.3 | 1.9 | 34.0 | 44.0 | 41.0 | 30.0 |

***ແຫຼ່ງຂໍ້ມູນ:***
***ຖັນທີ 1, 3, 5, 7:*** *ຜທ-ສຖຕ (2004), ການສຳຫຼວດການຊົມໃຊ້ ແລະ ໃຊ້ຈ່າຍຂອງຄົວເຮືອນ ປີ 2002/03*
***ຖັນທີ 2, 4, 6, 8:*** *ຜທ-ສຖຕ (2004), ການສຳຫຼວດການຊົມໃຊ້ ແລະ ໃຊ້ຈ່າຍຂອງຄົວເຮືອນ ປີ 2007/08*

## ຕາຕະລາງ 15: ກິດຈະກຳທາງເສດຖະກິດຂອງຜູ້ອອກແຮງງານ

| ລະຫັດ ISIC | A | B | C | D | E | F |
|---|---|---|---|---|---|---|
| ການຈັດແບ່ງກິດຈະກຳດ້ານເສດຖະກິດ | ກະສິກຳ | ການຂຸດຄົ້ນບໍ່ແຮ່ | ອຸດສາຫະກຳປຸງແຕ່ງ | ການສະໜອງໄຟຟ້າ, ອາຍແກັດ, ອາຍຮ້ອນ ແລະ ອາກາດປັບແຕ່ງ | ການສະໜອງນໍ້າ, ລະບາຍນໍ້າເສຍການບໍລິຫານຈັດການ ແລະ ເຄື່ອນໄຫວສິ່ງເສດເຫຼືອ | ການກໍ່ສ້າງ |
| ແຂວງ | | | | | | |
| ນະຄອນຫຼວງວຽງຈັນ | 15.1 | 13.0 | 45.7 | 20.2 | 32.1 | 37.0 |
| ຜົ້ງສາລີ | 0.6 | 0.1 | 0.4 | 1.2 | 1.0 | 1.0 |
| ຫຼວງນໍ້າທາ | 0.8 | 4.0 | 0.4 | 0.0 | 2.0 | 8.1 |
| ອຸດົມໄຊ | 2.0 | 0.5 | 1.9 | 1.6 | 2.3 | 1.0 |
| ບໍ່ແກ້ວ | 1.1 | 0.1 | 1.6 | 1.0 | 1.6 | 1.9 |
| ຫຼວງພະບາງ | 3.6 | 1.1 | 4.4 | 4.9 | 6.2 | 4.3 |
| ຫົວພັນ | 0.3 | 0.8 | 1.3 | 2.7 | 1.5 | 4.5 |
| ໄຊຍະບູລີ | 6.3 | 2.7 | 5.2 | 1.6 | 3.2 | 4.5 |
| ຊຽງຂວາງ | 0.7 | 0.3 | 1.7 | 1.8 | 2.5 | 1.0 |
| ວຽງຈັນ | 22.8 | 3.5 | 7.7 | 14.2 | 8.3 | 5.2 |
| ບໍລິຄຳໄຊ | 25.7 | 1.0 | 3.5 | 4.5 | 2.8 | 1.5 |
| ຄຳມ່ວນ | 8.6 | 8.9 | 5.7 | 12.4 | 6.5 | 4.0 |
| ສະຫວັນນະເຂດ | 5.2 | 61.5 | 9.4 | 10.9 | 10.6 | 8.3 |
| ສາລະວັນ | 2.0 | 0.0 | 2.2 | 7.6 | 4.4 | 2.6 |
| ເຊກອງ | 0.9 | 0.2 | 0.9 | 0.2 | 1.4 | 10.5 |
| ຈຳປາສັກ | 4.2 | 2.2 | 6.4 | 13.6 | 11.9 | 4.1 |
| ອັດຕະປື | 0.1 | 0.1 | 1.3 | 1.4 | 1.6 | 0.4 |

***ແຫຼ່ງຂໍ້ມູນ:***
*ການສຳຫຼວດເສດຖະກິດທົ່ວປະເທດ 2006*

## ຕາຕະລາງ 15: ກິດຈະກຳທາງເສດຖະກິດຂອງຜູ້ອອກແຮງງານ

| ລະຫັດ ISIC | G | H | I | J | K | L |
|---|---|---|---|---|---|---|
| ການຈັດແບ່ງກິດຈະກຳດ້ານເສດຖະກິດ | ການຄ້າ, ຂາຍຍົກ, ຂາຍຍ່ອຍ ແລະ ສ້ອມແປງລົດຍົນລົດຈັກ | ການຂົນສົ່ງ ແລະ ສາງ | ການເຄື່ອນໄຫວໃຫ້ທີ່ພັກອາໄສ ແລະ ການບໍລິການອາຫານ | ຂໍ້ມູນຂ່າວສານ ແລະ ການຕິດຕໍ່ສື່ສານ | ການເຄື່ອນໄຫວດ້ານອະສັງຫາລິມະຊັບ | ການເຄື່ອນໄຫວດ້ານການເງິນ ແລະ ການປະກັນໄພ |
| ແຂວງ | | | | | | |
| ນະຄອນຫຼວງວຽງຈັນ | 28.0 | 18.9 | 45.1 | 50.8 | 43.5 | 61.2 |
| ຜົ້ງສາລີ | 1.5 | 0.7 | 1.0 | 1.0 | 0.7 | 0.3 |
| ຫຼວງນ້ຳທາ | 2.4 | 0.4 | 2.1 | 1.4 | 1.7 | 1.2 |
| ອຸດົມໄຊ | 2.6 | 2.1 | 2.0 | 6.3 | 2.9 | 0.8 |
| ບໍ່ແກ້ວ | 2.1 | 3.1 | 1.4 | 1.3 | 5.9 | 0.9 |
| ຫຼວງພະບາງ | 5.9 | 8.1 | 12.7 | 11.7 | 3.0 | 8.6 |
| ຫົວພັນ | 2.7 | 3.4 | 1.3 | 0.5 | 1.3 | 1.3 |
| ໄຊຍະບູລີ | 5.6 | 9.7 | 2.2 | 6.2 | 5.2 | 0.7 |
| ຊຽງຂວາງ | 3.0 | 3.9 | 2.3 | 2.0 | 2.7 | 1.2 |
| ວຽງຈັນ | 8.0 | 14.4 | 8.3 | 2.6 | 5.7 | 3.8 |
| ບໍລິຄຳໄຊ | 3.9 | 3.5 | 2.2 | 2.4 | 2.3 | 2.0 |
| ຄຳມ່ວນ | 5.9 | 5.3 | 3.3 | 2.9 | 0.4 | 4.1 |
| ສະຫວັນນະເຂດ | 12.7 | 11.0 | 5.7 | 4.1 | 11.7 | 10.5 |
| ສາລະວັນ | 3.6 | 3.2 | 1.4 | 2.4 | 4.2 | 2.5 |
| ເຊກອງ | 1.0 | 0.5 | 0.5 | 0.8 | 1.0 | 0.0 |
| ຈຳປາສັກ | 9.5 | 11.3 | 7.5 | 2.7 | 6.6 | 0.7 |
| ອັດຕະປື | 1.4 | 0.4 | 0.9 | 1.1 | 1.0 | 0.3 |

***ແຫຼ່ງຂໍ້ມູນ:***
*ການສຳຫຼວດເສດຖະກິດທົ່ວປະເທດ 2006*

## ຕາຕະລາງ 15: ກິດຈະກໍາທາງເສດຖະກິດຂອງຜູ້ອອກແຮງງານ

| ISIC | M | N | P | Q | R | S |
|---|---|---|---|---|---|---|
| ການຈັດແບ່ງກິດຈະກໍາດ້ານເສດຖະກິດ | ການເຄື່ອນໄຫວດ້ານວິຊາຊີບ, ວິທະຍາສາດ ແລະ ເຕັກນິກ | ການເຄື່ອນໄຫວບໍລິການສະໜັບສະໜູນ ແລະ ຄຸ້ມຄອງບໍລິຫານ | ການສຶກສາ | ການເຄື່ອນໄຫວກ່ຽວກັບສຸຂະພາບມະນຸດ ແລະ ວຽກງານທາງສັງຄົມ | ສິລະປະບັນເທີງ ແລະ ການພັກຜ່ອນ | ການເຄື່ອນໄຫວບໍລິການອື່ນໆ |
| ແຂວງ | | | | | | |
| ນະຄອນຫຼວງວຽງຈັນ | 73.9 | 61.0 | 66.2 | 59.3 | 51.2 | 45.9 |
| ຜົ້ງສາລີ | 0.3 | 0.3 | 0.6 | 0.5 | 0.3 | 0.7 |
| ຫຼວງນໍ້າທາ | 1.4 | 0.4 | 0.3 | 0.9 | 1.3 | 1.4 |
| ອຸດົມໄຊ | 1.0 | 2.2 | 3.8 | 1.2 | 5.0 | 1.7 |
| ບໍ່ແກ້ວ | 0.4 | 1.8 | 1.5 | 0.3 | 0.6 | 0.7 |
| ຫຼວງພະບາງ | 3.7 | 6.9 | 4.4 | 3.0 | 3.7 | 6.3 |
| ຫົວພັນ | 0.9 | 0.3 | 1.5 | 1.2 | 0.5 | 1.0 |
| ໄຊຍະບູລີ | 0.6 | 0.3 | 2.1 | 0.5 | 2.9 | 2.6 |
| ຊຽງຂວາງ | 1.8 | 3.9 | 2.0 | 6.4 | 2.0 | 2.0 |
| ວຽງຈັນ | 3.4 | 14.1 | 2.7 | 3.3 | 9.4 | 9.8 |
| ບໍລິຄໍາໄຊ | 1.1 | 0.9 | 0.0 | 1.0 | 2.6 | 2.7 |
| ຄໍາມ່ວນ | 1.2 | 1.7 | 4.1 | 2.3 | 2.7 | 4.4 |
| ສະຫວັນນະເຂດ | 5.9 | 2.2 | 6.1 | 12.8 | 6.6 | 9.6 |
| ສາລະວັນ | 0.6 | 0.9 | 0.4 | 1.3 | 2.4 | 1.5 |
| ເຊກອງ | 0.1 | 0.0 | 0.1 | 0.1 | 0.3 | 0.5 |
| ຈໍາປາສັກ | 3.4 | 2.8 | 4.3 | 5.8 | 7.7 | 8.1 |
| ອັດຕະປື | 0.4 | 0.1 | 0.0 | 0.4 | 0.8 | 1.0 |

***ແຫຼ່ງຂໍ້ມູນ:***
*ການສໍາຫຼວດເສດຖະກິດທົ່ວປະເທດ 2006*

## ຕາຕະລາງ 16: ໂຄງປະກອບຫົວໜ່ວຍເສດຖະກິດພື້ນຖານຕາມແຕ່ລະຂະແໜງ ແບ່ງຕາມຮູບການຈັດຕັ້ງເສດຖະກິດ

| ລະຫັດສາລະບານກິດຈະກຳດ້ານເສດຖະກິດ 1 ຕົວເລກ | | ສ່ວນບຸກຄົນພາຍໃນ | ສ່ວນບຸກຄົນຕ່າງປະເທດ | ຮຸ້ນສ່ວນເອກະຊົນພາຍໃນ | ຮຸ້ນສ່ວນເອກະຊົນຕ່າງປະເທດ | ຮຸ້ນສ່ວນເອກະຊົນພາຍໃນກັບຕ່າງປະເທດ | ລັດຮຸ້ນສ່ວນກັບເອກະຊົນພາຍໃນ |
|---|---|---|---|---|---|---|---|
| A | ການກະສິກຳ | 96.3 | 1.1 | 0.7 | 0.4 | 0.3 | 0.1 |
| B | ການຂຸດຄົ້ນບໍ່ແຮ່ | 87.5 | 4.0 | 1.3 | 2.0 | 0.0 | 0.0 |
| C | ການອຸດສາຫະກຳປຸງແຕ່ງ | 97.8 | 0.9 | 0.5 | 0.2 | 0.2 | 0.0 |
| D | ການຕອບສະໜອງໄຟຟ້າ,ອາຍແກັດ, ອາຍອຸ່ນ ແລະ ອາກາດປັບແຕ່ງ | 19.3 | 0.9 | 0.0 | 1.8 | 0.0 | 0.9 |
| E | ການສະໜອງນ້ຳ, ລະບາຍນ້ຳເສຍ, ການບໍລິຫານຈັດການ ແລະ ກຳຈັດ ສິ່ງທີ່ເສດເຫຼືອ | 70.5 | 6.4 | 1.5 | 0.0 | 0.4 | 0.4 |
| F | ການກໍ່ສ້າງ | 82.2 | 3.3 | 3.2 | 0.6 | 1.3 | 0.2 |
| G | ການຄ້າ, ຂາຍຍົກ, ຂາຍຍ່ອຍ ແລະ ສ້ອມແປງລົດຍົນລົດຈັກ | 97.8 | 1.8 | 0.2 | 0.1 | 0.0 | 0.0 |
| H | ການຂົນສົ່ງ ແລະ ສາງ | 94.9 | 0.3 | 1.1 | 0.0 | 0.1 | 0.2 |
| I | ການເຄື່ອນໄຫວໃຫ້ທີ່ພັກອາໄສ ແລະ ການບໍລິການອາຫານ | 94.7 | 3.1 | 0.5 | 0.4 | 0.3 | 0.2 |
| J | ຂໍ້ມູນຂ່າວສານ ແລະ ການຕິດຕໍ່ສື່ສານ | 88.4 | 1.4 | 0.3 | 0.5 | 0.3 | 0.2 |
| K | ການເຄື່ອນໄຫວດ້ານການເງິນ ແລະ ການປະກັນໄພ | 20.1 | 1.7 | 5.4 | 1.3 | 2.7 | 4.7 |
| L | ການເຄື່ອນໄຫວດ້ານອະສັງຫາລິມະຊັບ | 97.7 | 0.3 | 0.6 | 0.0 | 0.2 | 0.2 |
| M | ການເຄື່ອນໄຫວດ້ານວິຊາຊີບ, ວິທະຍາສາດ ແລະ ເຕັກນິກ | 91.4 | 4.2 | 0.6 | 1.7 | 0.8 | 0.0 |
| N | ການເຄື່ອນໄຫວບໍລິການສະໜັບສະໜູນ ແລະ ຄຸ້ມຄອງບໍລິຫານ | 85.7 | 2.3 | 2.8 | 0.7 | 1.1 | 1.7 |
| P | ການສຶກສາ | 85.2 | 3.0 | 5.0 | 1.3 | 1.3 | 0.7 |
| Q | ການເຄື່ອນໄຫວກ່ຽວກັບການຮັກສາສຸຂະພາບມະນຸດ ແລະ ວຽກງານທາງສັງຄົມ | 96.0 | 0.8 | 1.6 | 0.5 | 0.0 | 0.0 |
| R | ສິລະປະ, ການບັນເທີງ ແລະ ການພັກຜ່ອນ | 91.8 | 1.8 | 0.8 | 0.1 | 0.1 | 1.1 |
| S | ການເຄື່ອນໄຫວບໍລິການອື່ນໆ | 96.7 | 3.0 | 0.1 | 0.1 | 0.0 | 0.0 |
| | ເປີເຊັນ (%) | 96.9 | 1.6 | 0.4 | 0.1 | 0.1 | 0.1 |
| | ຈຳນວນຫົວໜ່ວຍລວມ | **122,988.0** | **2,059.0** | **459.0** | **155.0** | **154.0** | **101.0** |

***ແຫຼ່ງຂໍ້ມູນ:***
*ການສຳຫຼວດເສດເສດຖະກິດທົ່ວປະເທດ 2006*

## ຕາຕະລາງ 16: ໂຄງປະກອບຫົວໜ່ວຍເສດຖະກິດພື້ນຖານຕາມແຕ່ລະຂະແໜງ ແບ່ງຕາມຮູບການຈັດຕັ້ງເສດຖະກິດ

| ລະຫັດສາລະບານກິດຈະກຳດ້ານເສດຖະກິດ 1 ຕົວເລກ | | ລັດຮຸ້ນສ່ວນກັບຕ່າງປະເທດ | ລວມໝູ່ | ລັດວິສາຫະກິດ | ເປີເຊັນລວມ | ຈຳນວນລວມ |
|---|---|---|---|---|---|---|
| A | ການກະສິກຳ | 0.2 | 0.5 | 0.3 | 100.0 | **4,319.0** |
| B | ການຂຸດຄົ້ນບໍ່ແຮ່ | 1.0 | 1.3 | 2.7 | 100.0 | **297.0** |
| C | ການອຸດສາຫະກຳປຸງແຕ່ງ | 0.1 | 0.2 | 0.1 | 100.0 | **24,331.0** |
| D | ການຕອບສະໜອງໄຟຟ້າ,ອາຍແກັດ, ອາຍອຸ່ນ ແລະ ອາກາດປັບແຕ່ງ | 6.1 | 0.0 | 71.1 | 100.0 | **114.0** |
| E | ການສະໜອງນ້ຳ, ລະບາຍນ້ຳເສຍ, ການບໍລິຫານຈັດການ ແລະ ກຳຈັດ ສິ່ງທີ່ເສດເຫຼືອ | 1.1 | 3.4 | 16.3 | 100.0 | **264.0** |
| F | ການກໍ່ສ້າງ | 1.4 | 0.6 | 7.2 | 100.0 | **628.0** |
| G | ການຄ້າ, ຂາຍຍົກ, ຂາຍຍ່ອຍ ແລະ ສ້ອມແປງລົດຍົນລົດຈັກ | 0.0 | 0.0 | 0.1 | 100.0 | **81,780.0** |
| H | ການຂົນສົ່ງ ແລະ ສາງ | 0.1 | 0.9 | 2.5 | 100.0 | **3,799.0** |
| I | ການເຄື່ອນໄຫວໃຫ້ທີ່ພັກອາໄສ ແລະ ການບໍລິການອາຫານ | 0.2 | 0.2 | 0.4 | 100.0 | **3,439.0** |
| J | ຂໍ້ມູນຂ່າວສານ ແລະ ການຕິດຕໍ່ສື່ສານ | 2.1 | 0.1 | 6.7 | 100.0 | **872.0** |
| K | ການເຄື່ອນໄຫວດ້ານການເງິນ ແລະ ການປະກັນໄພ | 4.0 | 25.1 | 35.1 | 100.0 | **299.0** |
| L | ການເຄື່ອນໄຫວດ້ານອະສັງຫາລິມະຊັບ | 0.0 | 0.6 | 0.3 | 100.0 | **618.0** |
| M | ການເຄື່ອນໄຫວດ້ານວິຊາຊີບ, ວິທະຍາສາດ ແລະ ເຕັກນິກ | 0.3 | 0.3 | 0.8 | 100.0 | **359.0** |
| N | ການເຄື່ອນໄຫວບໍລິການສະໜັບສະໜູນ ແລະ ຄຸ້ມຄອງບໍລິຫານ | 0.7 | 1.1 | 4.1 | 100.0 | **755.0** |
| P | ການສຶກສາ | 0.3 | 2.3 | 0.7 | 100.0 | **298.0** |
| Q | ການເຄື່ອນໄຫວກ່ຽວກັບການຮັກສາສຸຂະພາບມະນຸດ ແລະ ວຽກງານທາງສັງຄົມ | 0.0 | 0.8 | 0.3 | 100.0 | **375.0** |
| R | ສິລະປະ, ການບັນເທີງ ແລະ ການພັກຜ່ອນ | 0.1 | 0.1 | 4.1 | 100.0 | **1,013.0** |
| S | ການເຄື່ອນໄຫວບໍລິການອື່ນໆ | 0.0 | 0.1 | 0.1 | 100.0 | **3 353.0** |
| | ເປີເຊັນ (%) | **0.1** | **0.2** | **0.5** | **100.0** | **126,913.0** |
| | ຈຳນວນຫົວໜ່ວຍລວມ | **102.0** | **253.0** | **642.0** | **126,913.0** | **...** |

***ແຫຼ່ງຂໍ້ມູນ:***
*ການສຳຫຼວດເສດເສດຖະກິດທົ່ວປະເທດ 2006*

## ຕາຕະລາງ 17: ຈຳນວນແຮງງານ, ແຮງງານສະເລ່ຍ ແລະ ໂຄງປະກອບແຮງງານແບ່ງຕາມຂະແໜງການເສດຖະກິດ

| ລະຫັດສາລະບານກິດຈະກຳດ້ານເສດຖະກິດ1 ຕົວເລກ | | ຈຳນວນຫົວໜ່ວຍ | ຈຳນວນແຮງງານ (ຄົນ) | ໂຄງປະກອບ (%) | ແຮງງານສະເລ່ຍຕໍ່ຫົວຄົນ |
|---|---|---|---|---|---|
| A | ການກະສິກຳ | 4,319.0 | 20,277.0 | 5.9 | 4.7 |
| B | ການຂຸດຄົ້ນບໍ່ແຮ່ | 297.0 | 7,708.0 | 2.2 | 26.0 |
| C | ການອຸດສາຫະກຳປຸງແຕ່ງ | 24,331.0 | 105,234.0 | 30.4 | 4.3 |
| D | ການຕອບສະໜອງໄຟຟ້າ, ອາຍແກັດ, ອາຍອຸ່ນ ແລະ ອາກາດປັບແຕ່ງ | 114.0 | 3,167.0 | 0.9 | 27.8 |
| E | ການສະໜອງນ້ຳ, ລະບາຍນ້ຳເສຍ, ການບໍລິຫານຈັດການ ແລະ ກຳຈັດ ສິ່ງທີ່ເສດເຫຼືອ | 264.0 | 1,824.0 | 0.5 | 6.9 |
| F | ການກໍ່ສ້າງ | 628.0 | 12,496.0 | 3.6 | 19.9 |
| G | ການຄ້າ, ຂາຍຍົກ, ຂາຍຍ່ອຍ ແລະ ສ້ອມແປງລົດຍົນລົດຈັກ | 81,780.0 | 135,440.0 | 39.2 | 1.7 |
| H | ການຂົນສົ່ງ ແລະ ສາງ | 3,799.0 | 10,741.0 | 3.1 | 2.8 |
| I | ການເຄື່ອນໄຫວໃຫ້ທີ່ພັກອາໄສ ແລະ ການບໍລິການອາຫານ | 3,439.0 | 17,779.0 | 5.1 | 5.2 |
| J | ຂໍ້ມູນຂ່າວສານ ແລະ ການຕິດຕໍ່ສື່ສານ | 872.0 | 3,688.0 | 1.1 | 4.2 |
| K | ການເຄື່ອນໄຫວດ້ານການເງິນ ແລະ ການປະກັນໄພ | 299.0 | 4,440.0 | 1.3 | 14.8 |
| L | ການເຄື່ອນໄຫວດ້ານອະສັງຫາລິມະຊັບ | 618.0 | 1,492.0 | 0.4 | 2.4 |
| M | ການເຄື່ອນໄຫວດ້ານວິຊາຊີບ, ວິທະຍາສາດ ແລະ ເຕັກນິກ | 359.0 | 1,389.0 | 0.4 | 3.9 |
| N | ການເຄື່ອນໄຫວບໍລິການສະໜັບສະໜູນ ແລະ ຄຸ້ມຄອງບໍລິຫານ | 755.0 | 6,320.0 | 1.8 | 8.4 |
| P | ການສຶກສາ | 298.0 | 3,896.0 | 1.1 | 13.1 |
| Q | ການເຄື່ອນໄຫວກ່ຽວກັບການຮັກສາສຸຂະພາບມະນຸດ ແລະ ວຽກງານທາງສັງຄົມ | 375.0 | 1,043.0 | 0.3 | 2.8 |
| R | ສິລະປະ, ການບັນເທີງ ແລະ ການພັກຜ່ອນ | 1,013.0 | 3,695.0 | 1.1 | 3.6 |
| S | ການເຄື່ອນໄຫວບໍລິການອື່ນໆ | 3,353.0 | 5,094.0 | 1.5 | 1.5 |
| | **ລວມ** | **126,913.0** | **345,723.0** | **100.0** | **2.7** |

***ແຫຼ່ງຂໍ້ມູນ:***
*ການສຳຫຼວດເສດເສດຖະກິດທົ່ວປະເທດ 2006*